# ຮູ້ຈັກປະເທດ
# ໃນອາຊີຕາເວັນອອກສຽງໃຕ້

## In Search of South East Asia
### A Modern History

Revised Edition edited by David Joel Steinbery
1987

ພາກທີ 3 & 4
ລະບົບລາຊະການ ແລະເສດຖະກິດ & ການປ່ຽນແປງດ້ານສັງຄົມ
ແລະ ການກຳເນີດຂອງລັດທິຊາດນິຍົມ




ໂດຍຄະນະນັກຂຽນ
David P. Chandler, William R. Roff, John.W. Smail,
David Joel Steinberg, Robert H. Taylor, Alexander Woodside David K. Wyatt

# ຮູ້ຈັກປະເທດໃນອາຊີຕາເວັນອອກສຽງໃຕ້

ສະບັບຮຽບຮຽງໃຫມ່ 1987 ໂດຍ ເດວິດ ໂຈແອລ ສະເຕນເບີກ

ພາກທີ 3 & 4: ລະບົບລາຊະການ ແລະເສດຖະກິດ ແລະ

ການປ່ຽນແປງດ້ານສັງຄົມ ແລະການກຳເນີດຂອງລັດທິຊາດນິຍົມ

# In Search of South East Asia

Revised Edition edited by David Joel Steinberg, 1987.

Part III & IV: Frameworks for Nations and

---


**ໂດຍຄະນະນັກຂຽນ**

David P. Chandler, William R. Roff, John.W. Smail, David Joel Steinberg,
Robert H. Taylor, Alexander Woodside, David K. Wyatt.
Revised Edition edited by David Joel Steinberg, 1987.

**ຈັດພິມ ຢູ່ ສະຫະລັດ ອາເມລິກາ ໂດຍ**



© University of Hawaii Press, 1987



**ຄະນະໂຄງການ ແປ ແລະຈັດພິມ**

ດາຣາ ກັນລະຍາ, ດວງເດືອນ ບຸນຍາວົງ, ຣອງສາສະດາຈານ ສົມຫມາຍ ເປຣມຈິດ, ບຸນທັນ ພົງພິຈິດ

**ຄະນະບັນນາທິການ**

ດາລາ ກັນລະຍາ, ກົ່ງເດືອນ ເນດຕະວົງ

**ຜູ້ຊ່ອຍ ບ.ກ.**

ດວງໃຈ ແປງມະນີວົງ, ดวงแข บุนยาวัง

**ຕີພິມ ຈັດໜ້າ ພິສູດອັກສອນ ແລະອອກແບບປົກ**

ບໍລິສັດ ດອກເກດ ຈັດພິມຈຳກັດ

**ສະບັບພາສາລາວ ຈັດພິມໂດຍ**

ໂຄງການປົກປັກຮັກສາ ໜັງສືໃບລານລາວ, ຫໍສະໜຸດແຫ່ງຊາດ, ວຽງຈັນ, ສ.ປ.ປ.ລາວ. 2004

Lao Language Edition published by: Preservation of Lao Palm Leaf Manuscript Programme
National Library, Vientiane, Lao PDR.

**ໂດຍການອະນຸມັດ ລິຂະສິດ ຈາກສຳນັກພິມ ມະຫາວິທະຍາໄລ ຮາວາຍ, ສ. ອະເມຣິກາ.**

**ອຸປະຖຳໂດຍ** ມູນນິທິ ໂຕໂຢຕາ TOYOTA FOUNDATION

---

ພິມທີ່ ຈຳປາການພິມ (ປາບຄຳ-ໄຮເທັກ)

ທະບຽນພິມ ເລກທີ:

ຮູ້ຈັກປະເທດ

# ໃນອາຊີຕາເວັນອອກສຽງໃຕ້

ສະບັບປັບປຸງໃຫມ່ ໂດຍ ເດວິດ ໂຈລ ສະເຕນເບີກ 1987

## ພາກທີ III & IV

ລະບົບລາຊະການ ແລະເສດຖະກິດ
ການປ່ຽນແປງດ້ານສັງຄົມ ແລະການກຳເນີດຂອງລັດທິຊາດນິຍົມ

# In Search of South East Asia

A Modern History

Revised Edition edited by David Joel Steinberg 1987

**Part III&IV:**
Framworks for Nations &
Social Change and the Emergence of Nationalism


| ໂດຍຄະນະນັກຂຽນ | ຄະນະໂຄງການ ແປ ແລະຈັດພິມ |
|---|---|
| David P. Chandler | ດາຣາ ກັນລະຍາ |
| William R. Roff | |
| John.W. Smail | ດວງເດືອນ ບຸນຍາວົງ |
| David Joel Steinberg | ຣ.ສ. ສົມຫມາຍ ເປຣມຈິດ |
| Robert H. Taylor | |
| Alexander Woodside | ບຸນທັນ ພົງພິຈິດ |
| David K. Wyatt | |

## ສາລະບັນ


*ຄຳນຳ ຂອງຄະນະຈັດພິມ* I

**ພາກທີ 3 : ລະບົບລາຊະການ ແລະ ເສດຖະກິດ** 1

***ບົດນຳ*** 3

ບົດທີ 20 ການສ້າງຕັ້ງລັດໃຫມ່ 5

ບົດທີ 21 ໂຄງຮ່າງຂອງລະບົບລາຊະການ ແລະເສດຖະກິດ, 1870 - 1940 35

ບົດທີ 22 ການປ່ຽນແປງ ຮູບແບບເສດຖະກິດ 51

**ພາກທີ 4 :**
**ການປ່ຽນແປງດ້ານສັງຄົມ ແລະການກຳເນີດຂອງລັດທິຊາດນິຍົມ** 77

ບົດທີ 23 ອະລຳພະບົດ 78

ບົດທີ 24 ຊ່ອງທາງການຫັນປ່ຽນ 85

ບົດທີ 25 ປະເທດ ຟີລິປິນ 99

ບົດທີ 26 ປະເທດ ພະມ້າ 112

ບົດທີ 27 ປະເທດ ອິນໂດເນເຊຍ 122

ບົດທີ 28 ປະເທດ ຫວຽດນາມ 143

ບົດທີ 29 ປະເທດ ສະຫຍາມ 155

ບົດທີ 30 ປະເທດ ມາເລເຊຍ 163

ບົດທີ 31 ປະເທດ ລາວ ແລະ ກຳປູເຈຍ 171

# ຄຳນຳຂອງຄະນະຈັດພິມ

ໂຄງການປົກປັກຮັກສາໜັງສືໃບລານລາວ ເປັນໂຄງການໜຶ່ງຂອງ ຫໍສະໝຸດແຫ່ງຊາດ ແລະ ມີໜ້າທີ່ປົກປັກຮັກສາໜັງສືໃບລານ ທີ່ຢູ່ຕາມວັດວາອາຮາມ ໃນທົ່ວປະເທດບໍ່ໃຫ້ສູນເສຽ. ນອກຈາກ ພາລະບົດບາດ ຕົ້ນຕໍນີ້ແລ້ວ ໂຄງການຍັງມີໜ້າທີ່ເລື່ອກເອົາເລື່ອງ ຫລື ປຶ້ມສຳຄັນໆ ກ່ຽວກັບປະຫວັດ ສາດ ວັນນະຄະດີ ວັດທະນະທຳ ເວົ້າລວມຂອງລາວ ແລະຂອງພາກພື້ນ ມາຈັດພິມເຜີຍແຜ່ ໃຫ້ເປັນເອກະ ສານຄົ້ນຄວ້າສືບຕໍ່ໄປ.

ໂຄງການ ໄດ້ຮັບຄວາມໄວ້ວາງໃຈ ຈາກສຳນັກພິມ ມະຫາວິທະຍາໄລ ຮາວາຍ ໃຫ້ແປ ແລະ ພິມປຶ້ມ In Search of S.E.A: A Modern History "ຮູ້ຈັກປະທດ ໃນອາຊີຕາເວັນອອກສຽງໃຕ້" ຜົນງານການຂຽນ ຂອງຄະນະອາຈານຕາເວັນຕົກຜູ້ສຳຄັນ 7 ຄົນ ອອກເປັນພາສາລາວ. ຜ່ານມາ ທາງ ໂຄງການໄດ້ພິມໄປແລ້ວ 2 ເຫລັ້ມ ຄື : ພາກ 1 ແລະ ພາກ 2. ໃນເຫລັ້ມນີ້ ພວກເຮົາໄດ້ຈັດເອົາທັງ ພາກ 3 ແລະ ພາກ 4 ໄວ້ນຳກັນ. ສ່ວນພາກ 5 ຫລື ພາກສຸດທ້າຍຂອງປຶ້ມ ຈະໄດ້ຈັດພິມອີກຕ່າງຫາກ ໃນ ໂອກາດຕໍ່ໄປ. ເນື້ອໃນຂອງ ພາກ 3 ແລະ 4 ນີ້ ນັບວ່າ ສຳຄັນ ແລະໜ້າສົນໃຈຫລາຍ ເພາະເປັນລະຍະ ທີ່ມີການປ່ຽນແປງ ທາງດ້ານການເມືອງເສດຖະກິດ ແລະສັງຄົມຢ່າງຮຸນແຮງ. ຜົນກະທົບຈາກການ ປະຕິວັດອຸດສາຫະກຳໃນເອີຣົບ ແລະສົງຄາມໂລກຄັ້ງທີໜຶ່ງ ໄດ້ເຮັດໃຫ້ເກີດຂະບວນການຊາດນິຍົມຂຶ້ນ ໃນຫລາຍໆປະເທດ ເຊິ່ງມາຮອດປັດຈຸບັນ ຍັງຄົງບໍ່ໜົດສິ້ນຮ່ອງຮອຍ.

ຂໍຂອບໃຈ ສຳນັກພິມມະຫາວິທະຍາໄລ ຮາວາຍ ທີ່ອະນຸຍາດໃຫ້ລິຂະສິດແປກັບຈັດພິມ, ມູນນິທິ ໂຕໂຍຕາ (TOYOTA FOUNDATION) ທີ່ໃຫ້ການສະໜັບສະໜຸນມາແຕ່ຕົ້ນ ຕະຫລອດເວລາ ຫລາຍປີ .

ວຽງຈັນ ເດືອນ ມີນາ 2007

*ກົງເດືອນ ເນດຕະວົງ*

ຫົວໜ້າອຳນວຍການ ຫໍສະໝຸດແຫ່ງຊາດ

# ພາກທີ III

# ລະບົບລາຊະການ ແລະ ເສດຖະກິດ

# ບົດນຳ

ລັກສະນະເດັ່ນແຈ້ງທີ່ສຸດຂອງປະຫວັດສາດອາຊີຕາເວັນອອກສຽງໃຕ້ ໃນລະຫວ່າງຊຸມປີ 1870 ຫາ 1940 ແມ່ນການຍຶດຄອງ ແລະການເຂົ້າຄອບງຳໃນເລື່ອງການເມືອງ ເປັນລຳດັບຖັດມາ ໂດຍ ຝ່າຍຕາເວັນຕົກ. ລະຫວ່າງສາມ ຫລື ສີ່ທົດສະວັດ ຫລັງຈາກປີ 1870 ມະຫາອຳນາດຕາເວັນຕົກ ດຳເນີນການຍຶດອຳນາດ ເໜືອພື້ນທີ່ຢ່າງວ່ອງໄວ ແລະຄົບຖ້ວນ ທັງຜາບເອົາອານາຈັກຕ່າງໆ ກັບປະຊາຊົນທີ່ຍັງເຫລືອຢູ່ ໂດຍ ປະໄວ້ແຕ່ປະເທດ ສະຫຍາມ ໃຫ້ເປັນເອກະລາດ ຢູ່ໃນວົງລັດສະໜາມ ຂອງອິດທິພົນອັງກິດ. ພາຍຫລັງ ການຍຶດຄອງຈຶ່ງປາກົດລັດຫົວເມືອງຂຶ້ນທີ່ເຂັ້ມແຂງ ຕັ້ງໂຕຢູ່ຢ່າງມີອຳນາດສົມບູນ ຍອມຈຳນົນ ກໍແຕ່ ບາງເລື່ອງທີ່ເລືອກເອົາເທົ່ານັ້ນ. ເຊັ່ນໃນ ຟີລິບປິນ ຕັ້ງແຕ່ຊຸມທົດສະວັດຕົ້ນໆແຫ່ງສະຕະວັດທີ 20 ຈົນມາ ເຖິງຊຸມປີ 1940. ຈຶ່ງບໍ່ແມ່ນເລື່ອງໄຮ້ເຫດໄຮ້ຜົນທີ່ຈະເວົ້າວ່າ ເວລາກ່ວາຄ້ອນສະຕະວັດນີ້ ແມ່ນຍຸກສູງສຸດ ຂອງລັດທິອານານິຄົມ.

ເຖິງວ່າ ການປົກຄອງແບບອານານິຄົມໄດ້ແຜ່ກະຈາຍຢ່າງໄວວາ ທັງຝັງຮາກຕັ້ງຕົວໄວ້ຢ່າງ ໜັ້ນຄົງດີແລ້ວຢ່າງນີ້ ມັນກໍແຮ່ງກະຈາຍແຜ່ລາມໄວຂຶ້ນອີກກ່ວາເກົ່າ ໃນຊຸມປີ 1940-1950. ການປົກ ຄອງອານານິຄົມ ໄດ້ຜ່ານເຫດການຂຶ້ນໆລົງໆທີ່ສຳຄັນອັນໜ້າສົນໃຈເຫລົ່ານີ້ ເພາະວ່າມັນເປັນສ່ວນນຶ່ງ ຂອງຂະບວນການທາງວິທະຍາສາດທີ່ຍິ່ງໃຫຍ່ກ້ວາງຂວາງກ່ວາ ນັ້ນແມ່ນການປະຕິວັດວິທະຍາສາດ ແລະ ອຸດສາຫະກຳ ເຊິ່ງໄດ້ປ່ຽນແປງໃບໜ້າໂລກທັງໜົດໄປ ໂຮມທັງໂລກຕາເວັນຕົກ ໃນສະໄໝນີ້ນຳ. ພາຍ ໃຕ້ແສງສະຫວ່າງແຫ່ງວິວັດທະນາການນັ້ນ ຈະເຫັນວ່າ ການປົກຄອງໂດຍຊາດຕາເວັນຕົກໂດຍກົງ ໃນອາຊີຕາເວັນ ອອກສຽງໃຕ້ ເປັນສະຖາບັນຊາຍແດນອາຍຸສັ້ນ ຢູ່ໃນຂະບວນການ ແຫ່ງການປ່ຽນແປງ ທາງການເມືອງທົ່ວໂລກ.

ມະຫາອຳນາດອານານິຄົມ ບໍ່ພຽງແຕ່ຍຶດເອົາການຄວບຄຸມຢູ່ເໜືອລັດທີ່ມີຕົວຕົນຢູ່ແລ້ວໄວ້ໄດ້ຊື່ໆ ແຕ່ດ້ວຍການຕັດແຍກ ຜ່ານເສັ້ນແນວຂອງການຈັດຕັ້ງທາງການເມືອງ ຫລື ການສ້າງຄວາມເປັນປຶກ ແຜ່ນໃຫ້ແກ່ສັງຄົມແບ່ງແຍກທັງຫລາຍ ແຕ່ກ່ອນ ພວກເຂົາໄດ້ສ້າງໜ່ວຍເຂດການເມືອງ ແບບໃໝ່ຂຶ້ນ ໂດຍໄດ້ບັງຄັບໃຊ້ລະບົບອາຍາສິດແບບສະໄໝໃໝ່ ໃສ່ເທິງໜ່ວຍການເມືອງເຫລົ່ານີ້ ແລະໃຊ້ເວລາ ຢູ່ຫລາຍທົດສະວັດ ເພື່ອຂະຫຍາຍຂະໜາດ ແລະ ປັບປຸງກົນໄກອັນຈຳເປັນ ໃຫ້ສົມບູນຂຶ້ນ ສຳລັບລະບົບ ແບບນັ້ນ ເຊັ່ນ ສ້າງຕັ້ງກົມກອງ ຜະແນກການ ພາຍໃນລັດກະບານ ທຸກຮູບທຸກແນວ, ຕາໜ່າງທາງ ລົດໄຟ, ລະບົບພາສີອາກອນແບບໃໝ່, ຢູ່ໃນເລື່ອງນີ້ ພວກເຂົາປະຜົດຕົນ ເປັນຕົວກະຕຸ້ນ ສຳລັບຂະບວນ ການສາກົນອັນນຶ່ງ, ວາງຮູບແບບພື້ນຖານ ສຳລັບລັດຊາດໃໝ່ໆ ບໍ່ຕ່າງຫຍັງກັບທີ່ມະຫາອຳນາດອື່ນໆ ໄດ້ເຮັດມາແລ້ວຢູ່ໃນເອີລົບ, ຍີ່ປຸ່ນ ແລະແຫ່ງອື່ນໆ. ຂະບວນການແບບດຽວນີ້ ເກີດຂຶ້ນໃນສະຫຍາມ ເອກະລາດ ພາຍໃຕ້ການບໍລິຫານຂອງຊົນຊັ້ນນຳທ້ອງຖິ່ນ.

ຂະນະທີ່ຕາໜ່າງເຫລົ່ານີ້ ກຳລັງຂະຫຍາຍອອກໄປທົ່ວດິນແດນໃນພາກພື້ນອາຊີອາຄະເນ ໂດຍ ໄດ້ບັງຄັບ ໃຫ້ໃຊ້ລະບຽບຫລັກການໃໝ່ນັ້ນ, ການປ່ຽນແປງທາງເສດຖະກິດ ໄດ້ສົ່ງຜົນກະທົບ ສ້າງ ຄວາມເສຽຫາຍ ແກ່ຫາດແທ້ຂອງວິຖີຊີວິດແບບອາຊີຕາເວັນອອກສຽງໃຕ້. ອຸດສາຫະກຳການສົ່ງອອກ ທີ່ໄດ້ດຶງເອົາຜູ້ຄົນຫລາຍລ້ານ ເຂົ້າມາມີສ່ວນນຳນັ້ນ ໂດດດ່ຽງຜຸ່ງແຮງຂຶ້ນຫລາຍ ພາຍຫລັງປີ 1870, ມາ ເຖິງປີ 1940 ສ່ວນຫລວງໃນພາກພື້ນ ມີລະບົບເສດຖະກິດແບບສົ່ງອອກເປັນຕົ້ນຕໍ. ປະຊາກອນ ທີ່ເພີ່ມຈຳ ນວນຫລາຍຂຶ້ນຢ່າງໄວ ເມື່ອຫົກເຈັດທົດສະວັດຕົ້ນ ຂອງສະຕະວັດທີສິບເກົ້ານັ້ນ ຫລາຍຂຶ້ນເກືອບສາມທົບ

ລະຫວ່າງປີ 1870 ຫາ 1940. ພ້ອມໆກັບ ການເພີ່ມທະວີອັນນີ້ ກໍໄດ້ມີຂະບວນອົບພະຍົບຢ່າງໃຫຍ່ ທັງ ການອົບພະຍົບເຂົ້າມາສູ່ພາກພື້ນ ແລະທັງຢູ່ພາຍໃນເອງ. ລະບົບເສດຖະກິດເງິນຕາ ທີ່ຈຸ້ມຊ້ອນ ຢູ່ແຕ່ ສະຖາບັນທັນສະໄໝ ຕາມຕົວເມືອງທີ່ຫາກໍ່ຈະເກີດຂຶ້ນ ໄດ້ແຜ່ລາມອອກສູ່ເຂດຊົນນະບົດ ຢ່າງໄວໆ. ການປ່ຽນແປງເຫລົ່ານີ້ ກໍເຊັ່ນດຽວກັນ ມັນເປັນຜົນຮັບຈາກການປະຕິວັດອຸດສາຫະກຳ ແລະວິທະຍາສາດ ດ້ວຍວ່າ ອາຊີຕາເວັນອອກສຽງໃຕ້ ໄດ້ໂດດເຂົ້າໄປຫຍຸ້ງກ່ຽວ ກັບການປະຕິວັດເສດຖະກິດໂລກ ແລະກໍຍຶດ ເອົາສະຖານະຂອງຕົນໄວ້ ໃນເສດຖະກິດໂລກ ທີ່ພວມພົ້ນເດັ່ນຂຶ້ນນັ້ນແລ້ວ.

# ບົດທີ 20 ການສ້າງຕັ້ງລັດໃຫມ່

ນັກປະຫວັດສາດແຫ່ງສະຕະວັດທີຊາວ ຜູ້ກຳລັງດຳລົງຊີວິດຢູ່ໃນໂລກການເມືອງ ເຊິ່ງສ້າງຂຶ້ນຈາກຫລາຍໆ "ຊາດ" ສານສອດເຂົ້າກັນ ເປັນຮູບຕັດຕໍ່ຂອງໂລກຢ່າງເປັນລະບຽບນັ້ນ ຈຳຕ້ອງໄດ້ລຶບຮອຍຂອບປ່ອງຢ້ຽມແຫ່ງຄວາມນຶກຄຶດອອກຖິ້ມ ດ້ວຍຄວາມລະມັດລະວັງ ເພື່ອເບິ່ງແຜນທີ່ການເມືອງຂອງອາຊີຕາເວັນອອກສຽງໃຕ້ໃນປີ 1870 ຄືດັ່ງມັນເຄີຍເປັນໃນຍຸກດຽວກັນ. ແຜນທີ່ນີ້ ປະກອບດ້ວຍຫົວໜ່ວຍສູນກາງການເມືອງ ຈຳນວນນັບບໍ່ຖ້ວນ ທັງທີ່ມີອຳນາດ ຫລືມີດ້ານເລັກນ້ອຍ ເຊິ່ງອິດທິພົນຂອງສູນຄ່ອຍໆຫລຸດຫນ້ອຍລົງ ໃນແວດວົງຂອງບັນດາແຂວງທີ່ມີສິດປົກຄອງຕົນເອງເລັກໆນ້ອຍໆ ຫລືຫລາຍແດ ກັບເຂດບໍລິວານ ຈົນໄປຈອດຊ້ອນເຕັງກັບແວດວົງອິດທິພົນອື່ນໆ. ສູນກາງແບບນັ້ນຫົກແຫ່ງ ເປັນລັດໃຫຍ່ເກົ່າແກ່ ມີຮາກຖານຫມັ້ນຄົງ ໃນເລື່ອງປະເພນີທາງການເມືອງ ພ້ອມດ້ວຍປະຊາກອນຫລາຍຜ່ສົມຄວນ ແລະມີລັກສະນະຄ້າຍຄືກັນ ເຊັ່ນ ລາຊະອານາຈັກມັນດາເລ ແລະ ບາງກອກ ທີ່ນັບຖືພຸດທະສາສະຫນານິກາຍເຖຣະວາດ, ລັດທີ່ນັບຖື ລັດທິຂົງຈື້ ແລະ ຄາໂທລິກ ຢູ່ ເຫວ້ (Hue) ກັບ ມະນິລາ ແລະ ປະເທດຕາບຕໍ່ເລັກໆ ນ້ອຍໆຂອງ ກຳປູເຈຍ-ຝຣັ່ງ (Franco-Cambodian) ແລະ ຊຸະວາ-ດັດຊ໌ (Dutch-Java) ໂດຍມີສູນກາງຢູ່ ພະນົມເປັນ ແລະ ບັດຕາເວຽ. ມີການສ້າງຕັ້ງອານານິຄົມໃໝ່ຂຶ້ນສາມແຫ່ງ ຄື: ລັດຂ້າຫລວງໃຫຍ່ແຫ່ງ ພະມ້າ-ອັງກິດ, ອານານິຄົມໂກແຊງຊີນ (Cochinchina) ແລະ ອານານິຄົມຢູ່ນິຄົມຮ່ອງແຄບ. ເລີຍອອກໄປ ແມ່ນສອງເຂດກວ້າງໃຫຍ່ຂອງສູນກາງຂະຫນາດນ້ອຍສອງແຫ່ງ ເຊັ່ນ ຫົວເມືອງສານ-ລາວ (Shan-Lao) ຢູ່ດ້ານໃນຂອງແຜ່ນດິນໃຫຍ ແລະເຂດທີ່ ຊາວມະລະຢູ-ມຸດສະລິມ ຄອບຄອງເປັນເຈົ້າແຕ່ ສຸມາຕຣາ ລົງໄປຮອດ ມິນດາເນົາ ແລະຕໍ່ຈາກກົ່ວດອນມາເລ ລາມໄປເຖິງຫມູ່ດອນ ໂມລຸກກາສ (Moluccas). ສຸດທ້າຍ ຈຶ່ງແມ່ນສັງຄົມບໍ່ສັງກັດລັດຈຳນວນນັບບໍ່ໄຂ່ ທີ່ກະຈັດກະຈາຍລາມອ້ອມຮອບຜືນແຜ່ນດິນເຫລົ່ານີ້.

ແຜນທີ່ທາງການເມືອງຂອງອາຊີຕາເວັນອອກສຽງໃຕ້ ມັກສ້າງຂຶ້ນຕາມກົດເກນເຫລົ່ານີ້ ສະ ເຫມີແຕ່ກໍບໍ່ແມ່ນວ່າ ມັນຈະຄົງຕົວຢູ່ແບບນີ້ໄດ້ດົນນານ. ການກຳເນີດຂອງອານານິຄົມແບບໃຫມ່ ຢ່າງກະທັນຫັນໂດຍມີສູນກາງຢູ່ ຢ່າງກຸ້ງ (Rangoon) ໄຊ່ງອນ (Saigon) ແລະ ສິງກະໂປ ໄດ້ເລື່ອມບັງການປ່ຽນແປງທີ່ພວມຄືບຄານເຂົ້າມາໃນພາກພື້ນ. ໃນສີ່ທົດສະວັດຕໍ່ມາ ແຜນທີ່ຂອງອາຊີຕາເວັນອອກສຽງໃຕ້ຖືກແຕ້ມແຕ່ງຄືນໃຫມ່ ເພື່ອໃຫ້ສອດຄ່ອງກັບລະບຽບການເມືອງຂອງໂລກທີ່ຜັນເດັ່ນ, ການຈັດຕັ້ງຄືນໃຫມ່ມີສອງລັກສະນະທີ່ຕິດພັນກັນຢ່າງແຫນ້ນຫນຽວ. ອັນທີຫນຶ່ງ ແມ່ນຂະບວນການຍຶດຄອງ ແລະ ການເຕົ້າໂຮມເປັນອັນນຶ່ງອັນດຽວ ດັ່ງທີ່ສູນກາງການເມືອງຈຳນວນຫລວງຫລາຍຂອງລະບົບເກົ່າ ຖືກ ເຕົ້າໂຮມເຂົ້າກັນເປັນຫົກຫົວຫນ່ວຍໃຫມ. ສູນກາງເກົ່າຂະຫນາດໃຫຍ່ສາມແຫ່ງ ຖືກຍຶດຄອງ ຄື: ອັງກິດ ເອົາ ມັນດາເລ; ຝຣັ່ງ ເອົາ ເຫວ້ (Hue) ແລະ ອາເມຣິກາ ເອົາຟິລິບປິນ ພ້ອມດ້ວຍປະຊາຊົນ (ຄົນພະມ້າ, ຫວຽດນາມແລະຊາວຟິລິບປິນ) ທີ່ມີສ່ວນກ່ຽວຂ້ອງນຳ, ຈາກນັ້ນ ເມືອງເຫລົ່ານີ້ ກໍໄດ້ ກາຍເປັນແກນກາງຂອງອານານິຄົມຍຸກໃຫມ່ຂອງ ພະມ້າ-ອັງກິດ, ອິນດູຈີນ-ຝຣັ່ງ ແລະ ຟິລິບປິນ. ສ່ວນດິນແດນທີ່ເປັນເຂດຂອງ ສານ-ລາວ ແລະ ມະລະຢູ-ມຸດສະລິມ ນັ້ນ ໄດ້ຖືກແບ່ງປັນກັນເອງ ລະຫວ່າງ ມະຫາອຳນາດ ເຊິ່ງໂດຍທົ່ວໄປເຮັດເປັນຮູບແບບການປົກຄອງໂດຍທາງອ້ອມ. ເຂດແຜ່ນດິນໃຫຍ່ ຖືກແບ່ງປັນລະຫວ່າງ ອັງກິດ ສະຫຍາມ ແລະ ຝຣັ່ງ, ກາຍເປັນເຂດແດນເຊິ່ງປັດຈຸບັນແມ່ນລັດສານ ຂອງ ພະມ້າ, ປະເທດໄທ ພາກເໜືອ ພາກຕາເວັນອອກສຽງເໜືອ ແລະປະເທດລາວ. ພື້ນທີ່ສ່ວນໃຫຍ່ ຂອງເຂດເກາະດອນຕ່າງໆຖືກໂຮບເຂົ້າໃນຫມູ່ດອນຂອງ ອິນດີສ - ເນເທີແລນດ໌ ສ່ວນກົ່ວດອນ (ແຫລມ) ມະລະຢູ ແລະ ດອນບໍນຽວ ຕາເວັນຕົກສຽງເໜືອ ຕົກຢູ່ໃນເງື້ອມມືຂອງອັງກິດ ແລະດອນຕ່າງໆ ໃນຕາ ເວັນອອກ ໄດ້ກາຍເປັນດິນແດນ ເຊິ່ງປັດຈຸບັນເອີ້ນວ່າ

ຟິລິບປິນພາກໃຕ້. ກໍາພູເຈຍ ຖືກໂຮບເຂົ້າກັນກັບ ຫວຽດນາມ ແລະ ລາວ ເປັນອິນດູຈີນຂອງຝຣັ່ງ ແລະສັງ ຄົມນ້ອຍໆ ທີ່ບໍ່ສັງກັດລັດຈໍານວນຫລວງຫລາຍ ຕົກໄປຂຶ້ນກັບສູນໃຫຍ່ກວ່າ ບໍ່ສູນໃດກໍສູນຫນຶ່ງ ເຊິ່ງສ່ວນ ຫລາຍ ມັກໂຮມເອົາກິດຈະການທາງການເມືອງ ແລະການເຜີຍແຜ່ສາສະຫນາເຂົ້ານໍາກັນ. ປະມານປີ 1910 ຂະບວນການນັ້ນ ກໍສໍາເລັດລົງຢ່າງສົມບູນ, ອາຊີຕາເວັນອອກສຽງໃຕ້ທັງຫມົດ ຖືກໂຮບເຂົ້າເປັນລັດ ໃຫມ່ ຫົກລັດ ເຊິ່ງບັດນີ້ບໍ່ໄດ້ຖືກກໍານົດ ໂດຍອໍາ ນາດສູນກາງທີ່ແຜ່ລັດສະໝີອອກໄປຜ່ານແວດວົງອິດທິພົນ ເປັນຊັ້ນໆ ທີ່ຄ່ອຍໆຜ່ອນແຮງລົງຕາມລະຍະທາງ ແຕ່ຫາກຖືກກໍານົດໂດຍເສັ້ນຊາຍແດນອ້ອມຮອບບໍລິເວນ ຮອຍຕໍ່ແຜ່ນດິນ.

ສິ່ງທີ່ເກີດຂຶ້ນຢູ່ໃນການປ່ຽນແປງຄັ້ງນີ້ ໃນແງ່ຂອງຂົງເຂດອໍານາດທາງການເມືອງ ແມ່ນການ ສັບຊ້ອນຄືນໃຫມ່ໂຄງຮ່າງກ່ຽວກັບພື້ນຖານຂອງຄວາມຖືກຕ້ອງທາງການເມືອງ. ອໍານາດເກືອບທັງຫມົດ ຂອງສູນກາງດັ້ງເດີມທັງນ້ອຍ ແລະໃຫຍ່ ໄດ້ມາຍ້ອນສາສະຫນາ ແລະ ຕັ້ງຢູ່ບົນພື້ນຖານ ແຫ່ງຄວາມສັກ ສິດຂອງຜູ້ປົກຄອງ, ເຄື່ອງປະດັບແຫ່ແຫນ ແລະຫໍໂຮງຜາສາດ. ອີກຢ່າງຫນຶ່ງ ອໍານາດຂອງເຈົ້າປົກຄອງ ໃນເລື່ອງຄຸ້ມຄອງ ຕາມພາກປະຕິບັດຕົວຈິງແລ້ວ ຕ້ອງອາໄສການຄວບຄຸມກໍາລັງທະຫານ ຫລາຍກວ່າ ອາໄສກົນໄກການບໍລິຫານ ທີ່ເປັນວຽກງານປະຈໍາ. ແມ່ນແຕ່ໃນເມືອງ ເຫວ້ ມະນີລາ ແລະ ບັດຕາເວຽ ທີ່ຖື ວ່າເປັນສູນກາງບ່ອນຮັກສາປະເພນີໄວ້ຫນ້ອຍທີ່ສຸດໃນເລື່ອງນີ້, ກໍຍັງມີເທວະບຸດ ຈາກສະຫວັນ ກັບ ຜູ້ແທນ ຂອງພະຣາຊາເຈົ້າສັດທາສາສະຫນາຄຣິຕສ໌ ໃນປະເທດຝາກທະເລ ຂອງພວກເຂົາ ເອງ, ບ້ານທັງຫລາຍ ໃນ ຟິລິບປິນ ຖືກປົກຄອງໂດຍຄະນະສົງໂຮມັນຄາໂທລິກ ແລະພະນັກງານຊາວດັດຊ໌ ກໍໄປຫັ້ນມາຫນີ້ ໂດຍ ກັ້ງຄັນຮົ່ມໃຫຍ່ ຄືເທວະຣາຊາ ຂອງຊະວາຍຸກເກົ່າ. ພື້ນຖານແຫ່ງການປົກຄອງ ໄດ້ປ່ຽນແປງຢ່າງວ່ອງໄວ ລະຫວ່າງປີ 1870 ແລະ 1910. ກຽດສັກສີຂອງເຈົ້າແຂວງອານານິຄົມໃນ ພະມ້າ ອິນດູຈີນ ແລະ ມະລະຢູ ມາຈາກປະສິດທິພາບຂອງ ການຈັດອໍານາດການທະຫານ ແລະພາກພົນລະເຮືອນ ບໍ່ແມ່ນມາຈາກ ພະຣາ ຊາຜູ້ສັກສິດ; ພວກອາເມຣິກາ ໄດ້ຍັບໄລ່ການປົກຄອງຂອງນັກບວດ ໂຣມັນຄາໂທລິກອອກໄປ, ພວກດັດຊ໌ ປະຖິ້ມການໃຊ້ຄັນຮົ່ມໃຫຍ່ ແລະ ໄດ້ປະດິດພິທີການທາງໂລກແບບໃຫມ່ຂຶ້ນ. ພຶດຕິກໍາອັນທໍາອິດກວ່າຫມູ ຂອງເຈົ້າຊີວິດຈຸລະຈອມເກົ້າ ໃນຖານະກະສັດສະຫຍາມ ແມ່ນ ການອອກພະຣາຊະດໍາຣັດ ບໍ່ໃຫ້ຂ້າຣາຊະ ການຜູ້ເຂົ້າເຝົ້າພະອົງ ຫມອບຄານຢູ່ຕໍ່ຫນ້າພະອົງ. ດ້ວຍເຫດນີ້ ພະອົງຈຶ່ງບໍ່ໄດ້ສະຫລະອໍານາດຄືກັບເຈົ້າ ປົກຄອງອານານິຄົມຜູ້ອື່ນໆໃນປະເທດໃກ້ຄຽງ ເຊິ່ງພະອົງ ເຄີຍໄປຢ້ຽມຢາມແຕ່ຄາວຍັງຫນຸ່ມ, ພະອົງໄດ້ ຫັນມາໃຊ້ສິດອໍານາດຊະນິດທີ່ກວມກວ້າງຍິ່ງກວ່ານັ້ນແທນ.

ຢູ່ທົ່ວທຸກບ່ອນ ໂດຍສະເພາະໃນຫມູ່ປະຊາຊົນທໍາມະດາ ພະຣາຊະພິທີສັກສິດທັງຫລາຍ ຍັງຄົງ ມີຢູ່ຕໍ່ໄປ ຍ້ອນວ່າ ມັນໄດ້ຝັງແໜ້ນຢູ່ໃນສິລະປະພື້ນເມືອງ ແລະພາສາດັ້ງເດີມ, ມີການເວົ້າເຖິງ ທາດແທ້ ແລະຄວາມຫມາຍຂອງອໍານາດທາງການເມືອງ ໃນຮູບແບບທີ່ປະຊາຊົນເຊື່ອວ່າ ມັນຕ້ອງເປັນ ຢ່າງນັ້ນ. ແຕ່ຢູ່ໃສກໍຄືກັນຫມົດ ອໍານາດປະຕິບັດທາງການເມືອງແທ້ໆນັ້ນ ດໍາເນີນໄປຕາມຫລັກການ ຂອງລະບົບ ຂ້າຣາຊະການຝ່າຍຄລາລະວາດ. ຕາໜ່າງການບໍລິຫານສະໄຫມໃຫມ່ ແຜ່ກະຈາຍໄປທົ່ວຫົວຫນ່ວຍການ ເມືອງໃຫມ່, ຄຽງຄູ່ໄປກັບຕາຫນ່າງເຫລົ່ານັ້ນ ກໍໄດ້ເກີດມີການບໍລິການແບບພິເສດ ສະເພາະ ຕ່າງໆນາໆ ເພື່ອປະຕິບັດຫນ້າທີ່ໃຫມ່ໆ. ກະໂຕທາດແທ້ຂອງລັດຖະບານ ແລະເຂດແດນທາງພູມສາດເອງກໍໄດ້ກ້າວ ເຂົ້າສູ່ການປ່ຽນແປງເລິກເຊິ່ງຢ່າງຫນຶ່ງຄືກັນ.







HELD IN 1830

1831-1870

1871-1900

1901-1940

A BATTAMBANG
B JAMBI
C JOHORE
D KEDAH
E KELANTAN
F MALACCA
G MINANGKABAU
H NEGRI SEMBILAN
I PAHANG
J PENANG
K PERAK
L PERLIS
M SELANGOR
N SIEM REAP
O SINGAPORE
P TENASSERIM
Q TRENGGANU

# ຫົວເມືອງ ລັດສານ ແລະ ລາວ

ໃນປີ 1870 ດິນແດນເຂດພູດອຍທັງຫມົດຂອງຫົວເມືອງ ສານ ແລະ ລາວ ເລີ່ມແຕ່ບໍລິເວນແມ່ນ້ຳ ອິຣະວະດີ ພາກເໜືອໄປຮອດ ແມນ້ຳດຳ ໃນຫອຽດນາມເໜືອ ແລະຈາກ ຢູນນານ ໄປຮອດບໍລິເວນຕີນພູ ກ້ຳເໜືອ ທົ່ງຣາບລ່ອງແມ່ນ້ຳເຈົ້າພະຍາ ຍັງຄົງຢູ່ໃນສະພາບເກົ່າ ຄືທີ່ເຄີຍເປັນມາຕະຫລອດເວລາອັນ ຍາວນານໂດຍມີປະຊາກອນບໍ່ຫນາແໜ້ນ ແລະເປັນໂລກເອກະລາດຫນຶ່ງຕ່າງຫາກ ຢູ່ເບື້ອງໃນດ້ານຫລັງ ຂອງຣາຊະອານາຈັກທີ່ກວ້າງໃຫຍ່ກວ່າ ແລະມີປະຊາຊົນຫລາຍກວ່າຢູ່ແຜ່ນດິນໃຫຍ່ແຫ່ງ ອາຊີຕາເວັນ ອອກສຽງໃຕ້. ຢ່າງໃດກໍຕາມ ພາກພື້ນນີ້ ໄດ້ມີບົດບາດສຳຄັນອັນແປກຕ່າງມາແລ້ວຢ່າງຫນຶ່ງ ໃນສະ ໄໝມລັດທິຈັກກະພັດນິຍົມເອີຣົບ ເມື່ອກາງສະຕະວັດທີ 19. ໃນຂະນະທີ່ການທ້າທາຍສຳຄັນໃຫມ່ໆ ຈາກເອີ ຣົບ ພວມຫຍັບແໜ້ເຂົ້າມາຫາພະຣາຊະອານາຈັກໃຫຍ່ໆ ໃກ້ຊາຍຝັ່ງທະເລ ຫລືຕາມຊາຍ ຝັ່ງເອງ ເຊັ່ນ ເຫດການທີ່ ຍ່າງກຸ້ງ ບາງກອກ ດານັງ ແລະ ໄຊ່ງ່ອນ ໃນຊຸມປີ 1850 ນັ້ນ ສະແດງ ໃຫ້ເຫັນວ່າ ຄວາມ ສົນໃຈຂອງຊາວເອີຣົບ ໃນເວລານັ້ນ ສຸມໃສ່ທັງດິນແດນຕາມຊາຍຝັ່ງ ແລະດິນແດນ ເບື້ອງໃນ ຄື ລັດສານ ແລະລາວ. ການໃຫ້ສິດທາງການຄ້າ ແກ່ມະຫາອຳນາດຕາເວັນຕົກ ໃນສົນທິ ສັນຍາ - ທ່າເຮືອຂອງຈີນ ອັນເນື່ອງມາຈາກເສິກຝິ່ນ (1842) ບໍ່ອຳນວຍໃຫ້ບໍລິມາດການຄ້າ ສູງຂຶ້ນ ຫລາຍເທົ່າທີ່ ເອີຣົບ ກັບ ອະເມ ຣິກາ ຄາດຫວັງໄວ້, ດັ່ງນັ້ນ ນິທານກ່ຽວກັບດິນແດນຮັ່ງມີເບື້ອງໃນ ແລະປະຊາກອນຫນາແໜ້ນຂອງຈີນ ເຊິ່ງບໍ່ມີທາງເຂົ້າ ເຖິງໄດ້ຈາກຊາຍຝັ່ງທະເລຈີນ ຈຶ່ງເປັນທີ່ຕິດອົກຕິດໃຈຂອງພວກ ຝຣັ່ງ ແລະ ອັງກິດ ຜູ້ຫວັງຫາຜົນປະໂຫຍດທາງການຄ້າຢູ່. ຈຸດຫມາຍອັນເຮັ່ງຣີບ ສະ ເພາະຫນ້າຂອງ ຝຣັ່ງ ແລະ ອັງກິດ ກໍຄື ມົນທົນຍູນນານ ເຊິ່ງມະຫາອຳນາດທັງສອງຫວັງວ່າ ຊິໄປ ໃຫ້ຮອດໂດຍທາງນ້ຳ ຫລື ທາງລົດໄຟຈາກ ພະມ້ຳກ້ຳເໜືອ ຫລື ຂຶ້ນໄປຕາມແມ່ນ້ຳສາລະວິນ ຫລື ຂຶ້ນໄປຕາມແມ່ນ້ຳຂອງ ຕັ້ງແຕ່ ກຳປູເຈຍ ຫລື ຂຶ້ນໄປຕາມແມ່ນ້ຳແດງແຕ່ ຮາໂນຍ. ຄວາມຍິ່ງໃຫຍ່ມາ ແຕ່ເດີມ ຂອງຣາຊະອານາຈັກ ພະມ້ຳ ສະຫຍາມ ແລະ ຫອຽດນາມ ເໜືອຫົວເມືອງຕ່າງໆ ຕາມເສັ້ນທາງເຫລົ່ານີ້ ຖືກເບິ່ງຂ້າມ ແລະປະຕິເສດໄປ ໂດຍ ສະເພາະໃນເຂດທີ່ຫົວເມືອງດັ່ງກ່າວ ເຄີຍເປັນເມືອງສ່ວຍຂອງສອງປະເທດທີ່ໃຫຍ່ກວ່າ ຫລືຍິ່ງກວ່ານັ້ນມາ ແລ້ວ, ມັນຈຶ່ງແມ່ນການໄຂທາງໃຫ້ແກ່ ການພິພາດກັນ. ທາງກ້ຳຕາເວັນຕົກ ລັດກະຫຣ່ຽງ ທີ່ບໍ່ນັບຖື ພຸດທະສາສະຫນາ ທາງຊາຍແດນກ້ຳໃຕ້ ຂອງພູພຽງລັດສານ ໄດ້ກາຍເປັນຈຸດຂັດແຍ່ງອັນຮຸນແຮງ ສືບເນື່ອງມາແຕ່ສົງຄາມລະຫວ່າງ ອັງກິດ ກັບ ພະມ້ຳ ຄັ້ງທີສອງ. ປະເທດທີ່ຕັ້ງຢູ່ໃນບໍລິເວນຊາຍແດນ ທີ່ບໍ່ມີເຂດກຳນົດຄັກແນ່ ລະຫວ່າງ ພະມ້ຳ-ອັງກິດກ້ຳໃຕ້ ກັບອານາຈັກຂອງພະເຈົ້າມິນດອງ ມີສອງລັດ ໃຫຍ່ ຄືລັດຂອງ ກະຫຣ່ຽງ-ນີ ຕາເວັນອອກກັບ ລັດກະຫຣ່ຽງ - ນີ ຕາເວັນຕົກ (Eastern Karen-ni) ເຊິ່ງໃນປີ 1868 ຖືກແບ່ງອອກ ດ້ວຍອິດທິພົນຂອງ ອັງກິດ ແລະ ພະມ້ຳ. ໃນປີ 1875 ອັງກິດ ປະກາດໃຫ້ ກະຫຣ່ຽງ - ນີ ຕາເວັນຕົກ ເປັນລັດໃນອາຣັກຂາ, ສ່ວນ ກະຫຣ່ຽງ - ນີ ຕາເວັນອອກ ຍັງຄົງຄວາມສຳພັນອັນໃກ້ຊິດກັບ ມັນດາເລຢູ່. ຄວາມປະລາໄຊທາງການທູດຂອງພະເຈົ້າມິນດົງ ຕໍ່ອັງກິດ ໃນເລື່ອງການຕັ້ງລັດໃນອາຣັກຂາ ເປັນສາເຫດກະທັນຫັນໃຫ້ທັງສອງຝ່າຍ ບໍ່ປາຖະຫນາປ່ອຍໃຫ້ຂໍ້ຂັດແຍ່ງຜ່ານພົ້ນໄປ. ລັດສານ ທີ່ນັບຖືພຸດ ທະສາສະຫນາຈຳນວນຫລາຍກວ່າຊາວປ່າຍລັດຂຶ້ນໄປ ເຄີຍເປັນເມືອງສ່ວຍຂອງພະມ້ຳ ຍົກເວັ້ນຈຳນວນ ຫນ້ອຍຫນຶ່ງ. ຢ່າງໃດກໍຕາມ ລັດເຫລົ່ານັ້ນ ໄດ້ກາຍເປັນເປົ້າຫມາຍ ຂອງກອງທະຫານທີ່ຖືກສົ່ງໄປຈາກ ພະມ້ຳພາກໃຕ້ ນັບແຕ່ຊຸມປີ 1820 ເປັນຕົ້ນມາ ເນື່ອງຈາກວ່າ ລັດດັ່ງກ່າວເກີດມີຄວາມສຳຄັນທາງດ້ານ ເສດຖະກິດ ແລະທາງຍຸດທະສາດສຳລັບອັງກິດ. ທາງຣາຊະວັງ ພະມ້ຳ ຕອບສະຫນອງດ້ວຍຄວາມພະ ຍາຍາມໃຫມ່ບາງອັນ ເພື່ອຮຽກຮ້ອງເອົາຄວາມ ຈົງຮັກພັກດີ ຂອງພວກເຂົາຄືນມາ.

ການເຂົ້າແຊກແຊງຂອງອັງກິດ, ພະມ້ຳ ແລະບາງເທື່ອ ຈີນ ແລະ ສະຫຍາມ ມີທ່າອຽງສະຫນັບ ສະຫນຸນການປົກຄອງຕົນເອງ ຂອງທ້ອງຖິ່ນ ແລະການຕໍ່ສູ້ຂອງຜົນລະເມືອງ. ນັບແຕ່ ກາງສະຕະວັດນັ້ນ

ເປັນຕົ້ນມາ ຫລາຍລັດ ເຊັ່ນແສນຫວີ (Hsenwi) ໃນເຂດເໜືອສຸດ ໄດ້ຖືກດຶງເຂົ້າໄປ ພົວພັນກັບຄວາມ ວຸ່ນວາຍທາງການເມືອງ ເນື່ອງຈາກລັດເຫລົ່ານັ້ນ ຕໍ່ຕ້ານຂັດຂືນຄວາມພະຍາຍາມຂອງພະມ້າ ໃນການ ຟື້ນຊີບເຈົ້າປົກຄອງຜູ້ນິຍົມພະມ້າ. ດ້ວຍລາຍຮັບຈາກພາສີການຄ້າເອກະລາດທີ່ພວມຫລາຍຂຶ້ນ ແລະ ດ້ວຍຄວາມສາມາດເຂົ້າເຖິງອາວຸດສະໄໝໃໝ່, ລັດດັ່ງກ່າວຈຶ່ງຢູ່ເໜືອອຳນາດ ອັນແທ້ຈິງຂອງຣາຊະ ສຳນັກພະມ້າໃນເວລານັ້ນ. ເມືອງຊຽງຕຸງ ໄກສຸດທາງຕາເວັນອອກ ໄດ້ກາຍເປັນເປົ້າຫມາຍກົດດັນຈາກ ທິດຕ່າງໆ. ເມືອງນີ້ປະສົບກັບຄວາມລຳບາກ ຈາກການຮຸກຮານຂອງສະຫຍາມ ເຖິງສາມເທື່ອ ລະຫວ່າງ ປີ 1849 ແລະ1854 ແລະຂັບໄລ່ສະຫຍາມອອກໄປໄດ້ ດ້ວຍການຊ່ວຍເຫລືອ ຂອງ ພະມ້າ ແລະ ລັດສານ, ເຖິງວ່າຕ້ອງແລກປ່ຽນກັບອິດທິພົນພະມ້າ ທີ່ທະວີແຮງຂຶ້ນກໍຕາມ. ໂດຍສະ ເພາະເຈົ້າຊີວິດ ທິບໍ (TKing Thibaw) ເຊິ່ງພະຍາຍາມໃຫ້ພະມ້າ ຄວບຄຸມຊຽງຕຸງ ຢ່າງເຄັ່ງຄັດຫລາຍ ຂຶ້ນ ແຕ່ປະສົບຄວາມສຳເລັດ ກໍພຽງແຕ່ດ້ວຍການຍົວະເຍົ້າໃຫ້ເກີດການຂະບົດໃນປີ 1881-1882 ເທົ່ານັ້ນ. ບໍ່ດົນການຂະບົດກໍຂະຫຍາຍ ໄປເຖິງຫົວເມືອງໃກ້ຄຽງອື່ນໆ ແລະໃນທີ່ສຸດ ຄະນະ ຂະບົດກໍໄດ້ພັດທະນາຕົນເອງມາເປັນ "ສະມາພັນລິມ ບິນ" (Limbin Confederacy) ຂອງປີ 1885, ມັນເປັນພັນທະມິດ ຂອງ ຜູ້ປົກຄອງລັດສານທັງຫລາຍພາຍໃຕ້ ການນຳພາຂອງ ເຈົ້າຊາຍລິມບິນ ຊາວພະມ້າ ທີ່ໂຕນຫນີຈາກ ພະມ້າ-ອັງກິດ ກ່ອນເກີດສົງຄາມ ລະ ຫວ່າງ ພະມ້າ ກັບ ອັງກິດ ບໍ່ດົນ. ຈຸດປະສົງຂອງສະມາພັນ ແມ່ນ ຍຸຕິພາວະສົງຄາມລະຫວ່າງລັດສານ ທັງຫລາຍ ເພື່ອຊ່ວຍໃຫ້ລັດເຫລົ່ານັ້ນ ສາມາດຕໍ່ຕ້ານກັບການ ບີບຄັ້ນຂອງພະມ້າ ແລະບາງທີອາດຮວມ ທັງການນຳໃຊ້ຮູບແບບຕາມອັງກິດນຳ. ອາບາຈັກລານນາ ຢູ່ຊຽງໃຫມ່ປັດຈຸບັນຢູ່ໃນພື້ນທີ່ພາກເໜືອຂອງ ປະເທດໄທ ຂະນະນັ້ນ ຖືກໂອນເຂົ້າໄປຢູ່ພາຍໃຕ້ອຳນາດ ການປົກຄອງອັນຫລົ້ມແຫລວ ຂອງບາງກອກ ໃນປີ 1777, ຫລັງຈາກມີການສູ້ຮົບຍືດເຍື້ອ ຕໍ່ເນື່ອງກັນ ຢູ່ເຖິງ 40 ປີ. ເມື່ອ ພະມ້າ ຖືກຂັບໄລ່ອອກໄປຈາກ ອົງເຂດນັ້ນໃນປີ 1804 ແລ້ວ ລັດນັ້ນກໍຖືກ ປະຖິ້ມ ເກືອບຢ່າງວ່າໂດດດ່ຽວຜູ້ດຽວ ຂະນະດຽວກັນມັນກໍຕ້ຳ ໂຮມເອົາປະຊາຊົນທີ່ມີຢູ່ດ້ວຍເລັກນ້ອຍ ໃນເມືອງທີ່ປ້ອງກັນຕົນເອງໄດ້ ແລະບາງເວລາກໍລ່ວງລ້ຳຕີເຂົ້າໄປ ໃນລັດສານ ເພື່ອກວາດເອົາກຳລັງຄົນມາໄວ້. ຫລັງຈາກເຄິ່ງສະຕະວັດນັ້ນມາ, ຫມາກຜົນຫນຶ່ງຈາກຄວາມ ສົນໃຈໃຫມ່ໆ ຂອງພວກຢູຣົບຕໍ່ປ່າໄມ້ສັກ ຂອງຊຽງໃຫມ່ ແມ່ນຄວາມຂັດແຍ່ງໃນເລື່ອງສຳປະທານປ່າ ແລະອັນທີ່ ພະມ້າອັງກິດ ແນມເບິ່ງວ່າ ເປັນຂໍ້ຈຳກັດ ຕໍ່ການການຄ້າໃນພາກພື້ນຂອງຕົນອັນບໍ່ສາມາດ ຍອມຮັບເອົາໄດ້, ເຈົ້າຊີວິດທີ່ ບາງກອກ ຮູ້ສຶກເຖິງໄພອັນຕະລາຍຕໍ່ຄວາມເປັນໄປໄດ້ວ່າ ພວກເຈົ້າປົກຄອງ ທາງຊຽງໃຫມ່ ອາດເກີດຜິດຖຽງກັນເອງ ແລະກັບອັງກິດ. ດັ່ງນັ້ນ ບາງກອກ ຈຶ່ງແຕ່ງຕັ້ງຄົນຂອງຕົນໄປ ປົກຄອງ ຊຽງໃຫມ່ໃນປີ 1870 ແລະ ອີກຫ້າປີຕໍ່ມາ ຈຶ່ງແຕ່ງຕັ້ງຂ້າຫລວງໃຫຍ່ຂອງສະຫຍາມຜູ້ທຳອິດມາ ປະຈຳຢູ່ຊຽງໃຫມ່ ເພື່ອຮັກສາຜົນປະໂຫຍດຂອງ ສະຫຍາມ ແລະເພື່ອປ້ອງກັນຄວາມຂັດແຍ່ງທີ່ຈະເກີດ ຂຶ້ນກັບອັງກິດອີກ.

ຄວາມບໍ່ສະຫງົບແບບດຽວກັນນີ້ ໄດ້ເກີດຂຶ້ນໃນຫົວເມືອງຕ່າງໆ ຂອງລາວ ທາງກ້ຳຕາເວັນ ອອກ. ການປາບປາມຂະບວນຕໍ່ຕ້ານ ຂອງເຈົ້າອະນຸ ໃນປີ 1825-27 ໂດຍ ບາງກອກ ແລະການອົບພະຍົບປະຊາ ກອນຈຳນວນຫລາຍ ຈາກເຂດທົ່ງພຽງພາກກາງ ໄປຕັ້ງຖິ່ນຖານຢູ່ເຂດພູພຽງໂຄຣາດນັ້ນ ໄດ້ປ່ອຍໃຫ້ ອານາຈັກຫລວງພະບາງ ກັບຫົວເມືອງນ້ອຍໆຈຳນວນນຶ່ງທາງຕາເວັນອອກ ແລະ ທິດເໜືອຄົງຕົວເປັນ ເອກະລາດໄດ້ ທັງທີ່ວ່າ ແຕ່ກ່ອນເຄີຍເປັນເມືອງສ່ວຍຂຶ້ນຕໍ່ ບາງກອກ ແລ້ວ. ຕັ້ງແຕ່ປີ1872 ເປັນຕົ້ນມາ ອົງເຂດທາງເໜືອທັງຫມົດ ຖືກພວກກອງໂຈນຫ້ ຈາກຢູນນານ ເຂົ້າມາຮຸກຮານ, ພວກ ໂຈນກຸ່ມນີ້ ເດີນທາງໄປທົ່ວທຸກອົງເຂດ ຈູດເຜົາທຳລາຍບ້ານເມືອງ ແລະປຸ້ນຊ້າປະຊາຊົນໄປຕະຫລອດທາງ ແລະລົງ ມາຮອດ ວຽງຈັນ ໃນປີດຽວກັນນັ້ນ. ເມື່ອບໍ່ສາມາດຕ້ານທານການຮຸກຮານນີ້ໄດ້ ເຈົ້າຊີ ວິດຫລວງພະບາງ ຈຶ່ງໄດ້ມີພະຣາຊະສານໄປຫາເຈົ້າຊີວິດ ບາງກອກ. ຕະຫລອດເວລາລະຫວ່າງຊຸມປີ 1870 ຫາ 1880 ນັ້ນ ລັດຖະບານສະຫຍາມ ໄດ້ສົ່ງກອງທະຫານຂຶ້ນໄປທາງເໜືອຫລາຍເທື່ອ. ເນື່ອງຈາກການຍົກທັບມາແຕ່

ລະເທື່ອນັ້ນ ເປັນການມາຕິລະຍະສັ້ນໆ ແລະການເຄື່ອນທັບກໍຊັກຊ້າເກີນກວ່າຈະ ຕິດຕາມພວກໂຈນຫໍ້ທັບ ກອງທະຫານເຫລົ່ານັ້ນ ຈຶ່ງປະສົບຄວາມສຳເລັດພຽງແຕ່ຫນ້ອຍດຽວ. ຄວາມ ຈິງແລ້ວ ໃນປີ 1887 ພວກ ຫໍ້ໄດ້ເຂົ້າປຸ້ນກະໂຕເມືອງຫລວງພະບາງ. ເຈົ້າຊີວິດຫລວງພະບາງ ກຽມຕົວ ຫລົບຫນີດ້ວຍການຊ່ວຍເຫລືອ ຂອງ ກົງສູນຝຣັ່ງ ຊື່ ໂອກູດສ໌ ປາວີ (Auguste Pavie) ແຕ່ຄວາມສັດທາ ເຊື່ອ ຫມັ້ນຂອງພະອົງຕໍ່ກະສັດ ສະ ຫຍາມ ຄອນແຄນລົງຫລາຍ ແລະໃນເວລາດຽວກັນ ຄວາມຫວັງຂອງ ຝຣັ່ງ ໃນການຍຶດເອົາ ຫລວງພະ ບາງ ເຂົ້າເປັນສ່ວນນຶ່ງຂອງອານານິຄົມແບບງ່າຍໆ ກໍໄດ້ຮັບການສະ ໜັບສະໜຸນ.

ຮວມຄວາມແລ້ວ ໃນປີ 1885 ອິດທິພົນ ແລະການຄວບຄຸມຂອງ ເຈົ້າຊີວິດສະຫຍາມ ກັບ ພະມ້າ ເໜືອດິນແດນຂອງ ສານ ແລະ ລາວ ບໍ່ໄດ້ເຂັ້ມແຂງ ຄື ໃນລະຍະທີ່ຜ່ານມາເມື່ອສະຕະວັດກ່ອນ. ເຖິງແມ່ນ ວ່າ ພະມ້າ ແລະສະຫຍາມ ໄດ້ພະຍາຍາມເຮັດໃຫ້ຖານະຂອງຕົນເຂັ້ມແຂງຂຶ້ນ ພວກເຂົາກໍເຮັດໄດ້ແຕ່ຢູ່ ພາຍໃນຂອບເຂດພະຣາຊະອຳນາດຂອງເຈົ້າປົກຄອງ ທີ່ມີມາແຕ່ເດີມຕາມປະເພນີ ກັບຫົວເມືອງຂຶ້ນຕົນ ເອງເທົ່ານັ້ນ. ໃນລະຫວ່າງຫົວເມືອງລັດສານນຳກັນເອງ ພະມ້າ ໄດ້ພະຍາຍາມທະວີການຄວບຄຸມ ໂດຍໃຊ້ ອຳນາດຂອງເຈົ້າຊີວິດຫລາຍຂຶ້ນ ແຕ່ມັນກາຍເປັນການຍົວະເຍົ້າໃຫ້ເກີດຂະບົດ ທັ້ງຊຸກຍູ້ ຫລື ອຳນວຍຄໍ ສະດວກໃຫ້ແກ່ການຂະຫຍາຍອຳນາດຂອງ ອັງກິດ ໃນພາຍລຸນມາ. ເຖິງແມ່ນວ່າ ຄວາມພະຍາຍາມ ຂອງສະຫຍາມ ໃນທຳນອງດຽວກັນຈະແນບນຽນກວ່າ (ເຊັ່ນກໍລະນີ ເມືອງຊຽງໃຫມ່) ຫລື ໂດຍການໃຊ້ ກຳລັງ (ເຊັ່ນກໍລະນີ ຫລວງພະບາງ) ລາຊະສຳນັກບາງກອກ ບໍ່ສາມາດເຮັດໃຫ້ເກີດການປ່ຽນແປງແບບ ຍືນຍົງ ດ້ວຍວິທີການແບບເກົ່າ. ຜົນຮັບຢູ່ບ່ອນນີ້ ກໍຄືກັບຢູ່ບ່ອນອື່ນໆ ຄືເກີດມີແຜນທີ່ໃຫມ່ສຳລັບແຜ່ນດິນ ໃຫຍ່ຂອງອາຊີຕາເວັນອອກສຽງໃຕ້ ເຊິ່ງຮ່າງຂຶ້ນລະຫວ່າງປີ 1885 ແລະ 1909 ຕາມຄຳສັ່ງຢ່າງເປັນ ທາງການຂອງຝຣັ່ງ ແລະ ອັງກິດ ແລະຕາມແນວຄວາມຄຶດໃຫມ່ຂອງສະຫຍາມ.

## ແຂວງພະມ້າ

ລະບົບການບໍລິຫານ ແລະລະບົບເສດຖະກິດ ພະມ້າ ອັງກິດ (British Burma) ເຕີບໃຫຍ່ຢູ່ພາຍໃຕ້ ຮົ່ມເງົາຂອງ ແບບປະຕິບັດຄືກັບຢູ່ ອິນເດຽ ອັງກິດ (British Indian) ແລະເຮັດໃຫ້ຖືກຕ້ອງ ໃນນາມຂອງ ລັດທິເສລີນິຍົມແຫ່ງສະຕະວັດທີ 19. ບໍ່ໄດ້ມີການຄາດຄະເນເຖິງຜົນສະທ້ອນອັນເລິກເຊິ່ງ ໃນດ້ານການ ເມືອງ ທີ່ບັງເກີດຂຶ້ນໃນທັນທີ ເນື່ອງຈາກການນຳໃຊ້ລະບົບເສດຖະກິດແບບທຶນນິຍົມ ແລະການປົກຄອງ ດ້ວຍກົດຫມາຍ ອິນເດຽ ອັງກິດ ຢູ່ໃນແຂວງຕະນາວສີ ກັບ ອາຣະກັນ (Tenassirim and Arakan) ເປັນເທື່ອ ທຳອິດ ພາຍຫລັງສົງຄາມ ອັງກິດ-ພະມ້າ ປີ 1826 ແລະຍັງບໍ່ຮູ້ເມື່ອຄີງ ເມື່ອເຂດທີ່ອັງກິດປົກຄອງ ຂະ ຫຍາຍຕົວອອກໄປ ແລະບຽດຍຶດເອົາເຂດແຂວງເມືອງຂອງພະມ້າກ້ຳໃຕ້ໄດ້ ລະຫວ່າງສົງຄາມ ຄັ້ງທີ ສອງ (1852-1853). ໃນຂັ້ນທຳອິດ ແຕ່ລະພາກພື້ນ ເປັນ "ພູດແບ່ງຫນຶ່ງ" ຂອງລັດຖະບານອິນເດຽ ເຊິ່ງມີຂ້າ ຫລວງເປັນຫົວຫນ້າ ແຕ່ໃນປີ 1862 ເຂດດິນທັງສາມ ຖືກໂຮບເຂົ້າກັນຢູ່ພາຍໃຕ້ອຳນາດ ຂອງຂ້າຫລວງ ໃຫຍ່ຢູ່ ຢ່າງກຸ້ງ. ດ້ວຍຄວາມພະຍາຍາມ ຢາກເຕົ້າໂຮມປະເທດ ແລະເອົາອິນເດຽ ເປັນສູນກາງ, ລັດຖະ ບານອິນເດຽ ຈຶ່ງໃຫ້ຄວາມເອົາໃຈໃສ່ແຕ່ຫນ້ອຍດຽວ ຕໍ່ຄວາມແຕກຕ່າງຫລາຍອັນຫລາຍແນວ ລະຫວ່າງ ອິນເດຽ ກັບ ພະມ້າ. ຕົວຢ່າງ ການປົກຄອງອານານິຄົມຂອງອັງກິດ ໃນພະມ້ານັ້ນສ້າງຕັ້ງຢູ່ບົນພື້ນຖານ ຮູບແບບຂອງ ອິນເດຽ ຄື ການມີຫົວຫນ້ານຳພາຢູ່ໃນບ້ານ ແລະສິດໃນການຊົມໃຊ້ທີ່ດິນ, ການພົວພັນອັນດີ ລະຫວ່າງບ້ານຕໍ່ບ້ານ, ບ້ານຕໍ່ເມືອງ ແລະຫົວຫນ້າ (ພໍ່)ບ້ານໃນພະມ້າ ສ່ວນຫລວງຫລາຍ ກໍຖືກເບິ່ງຂ້າມ ຄວາມສຳຄັນໄປ. ລະບົບການປົກຄອງຕາມແບບ ອິນເດຽ ໂດຍກົງ ຖືກນຳ ມາບັງຄັບໃຊ້. ຄວາມມີປະສິດ ທິພາບ ແລະການພັດທະນາເສດຖະກິດ ໂດຍສະເພາະ ອັນທີ່ກ່ຽວກັບການ ສົ່ງອອກສິນຄ້າປະເພດເຂົ້າ

ກັບໄມ້ສັກ ໄດ້ກາຍເປັນຄຳຂວັນທ່ອງຂຶ້ນໃຈ ຂອງລັດຖະບານໃນຂະນະທີ່ຮູບແບບ ແລະລະບົບປົກຄອງອັນ ແປກຕ່າງຂອງມັນ ໄດ້ຂະຫຍາຍອອກໄປທົ່ວຊົນນະບົດ.

ຄວາມສົນໃຈທາງເສດຖະກິດຂອງ ອັງກິດ ເຊິ່ງມີຈຸດສຸມຢູ່ ຢ່າງກຸ້ງ ຫລັງຈາກຍຶດເມືອງນີ້ໄດ້ ໃນປີ 1852 ບໍ່ດົນກໍຕື່ມແຮງກະຕຸກໃສ່ການຂະຫຍາຍການປົກຄອງຂອງ ອັງກິດ ອອກໄປທົ່ວອານາຈັກ ມັນດາເລ. ບໍລິສັດຮັບສົ່ງສິນຄ້າ ແລະການເງິນ ທີ່ກ່ຽວຂ້ອງກັບການຄ້າຕ່າງປະເທດ ພ້ອມໆກັບອຸດສາ ຫະກຳຂຸດຄົ້ນ ໂດຍສະເພາະແມ່ນໄມ້ສັກ ມີຜົນປະໂຫຍດໃນການຂະຫຍາຍພື້ນທີ່ປະຕິບັດການ ອອກໄປທາງເໜືອ ຕາມ ລອງແມ່ນ້ຳອິຣະວະດີ ທັງຝັນຫວານວ່າຈະໄປໃຫ້ຮອດຈີນ. ໂດຍຜ່ານສະພາການຄ້າທີ່ ຢ່າງກຸ້ງ ແລະການ ຈັດການແບບດຽວກັນໃນ ອັງກິດ, ບໍລິສັດເຫລົ່ານັ້ນ ໄດ້ບີບຄັ້ນລັດຖະບານ ຢ່າງກຸ້ງ, ການັດຕາ ແລະ ລອນດອນ ໃຫ້ຍໍເອົາສຳປະທານທາງການຄ້າຫລາຍຂຶ້ນຈາກ ເຈົ້າຊີວິດມິນດົງ ແລະ ເມື່ອພະເຈົ້າມິນດົງ ກັບຜູ້ສືບທອດອຳນາດຂອງພະອົງ ບໍ່ສາມາດລົບລ້າງການຜູກຂາດການຄ້າ ຂອງຫລວງທັງຫມົດ ພວກ ເຂົາກໍຍົນຂວາຍຫາທາງຍຶດເອົາດິນແດນທີ່ເຫລືອຂອງອານາຈັກມາເປັນຂອງຕົນ.

ຄວາມສຳພັນລະຫວ່າງ ອັງກິດ ກັບ ພະມ້າ ເສື່ອມຖອຍລົງຢ່າງໄວວາໃນຊຸມປີ 1870 ເນື່ອງຈາກ ເຈົ້າຊີວິດມິນດົງ ຫມົດສັດທາໃນຄວາມຫວັງດີຂອງອັງກິດ ແລະຍ້ອນວ່າທາງອັງກິດເອງ ກໍຫມົດຄວາມ ອົດທົນກັບເຈົ້າຊີວິດມິນດົງ ຄືກັນ. ໃນປີ 1872 ເມື່ອຫມົດຫວັງໃນເລື່ອງການຍອມຮັບຮູ້ສະຖານະພາບ ເອ ກະລາດແຫ່ງອານາຈັກຂອງພະອົງແລ້ວ, ພະເຈົ້າມິນດົງ ໄດ້ສົ່ງຄະນະລາຊະທູດໄປຢູລົບ. ພວກ ລາຊະທູດ ໄດ້ຮັບອະນຸຍາດໃຫ້ເຂົ້າເຝົ້າພະລາຊິນີ ວິກທໍເຣຍ (Queen Victoria) ກໍແຕ່ໃນເວລາມີລັດຖະມຸນຕີຕ່າງປະ ເທດຂອງອິນເດຍ ຕິດຕາມໄປນຳເທົ່ານັ້ນ, ດັ່ງນັ້ນ ຈຶ່ງບົ່ງຊີ້ເຖິງສະຖານະພາບຂອງ ພະມ້າ ວ່າ ເປັນພຽງ ລັດປະເທດສະລາດຂອງອິນເດຍ ບໍ່ແມ່ນກະສັດຜູ້ມີຖານະເທົ່າທຽມກັນ. ດັ່ງນັ້ນ ພວກລາຊະທູດ ຈຶ່ງພະຍາ ຍາມສະແຫວງຫາການຮັບຮູ້ຈາກລັດຖະບານຝຣັ່ງ ແລະ ອິຕາລີ ແຕ່ໄດ້ຮັບພຽງສົນທິສັນຍາທາງການຄ້າ ເທົ່ານັ້ນ. ພະເຈົ້າຊີວິດມິນດົງ ຖືກມັດຕີນມັດມື ຍ້ອນເປັນປໍລະປັກ ກັບ ອັງກິດ ຫລາຍຂຶ້ນ ແລະຖືກສົ່ງໄສ ໃນເລື່ອງທີ່ພະອົງໄປເຈລະຈາກັບມະຫາອຳນາດຢູລົບອື່ນໆ ແລະດ້ວຍ ຄວາມລັ່ງເລ ຫລື ຄວາມໄຮ້ສະມັດ ຖະພາບຂອງ ຝຣັ່ງ ກັບ ອິຕາລີ ເອງ ເພື່ອຊ່ອຍອານາຈັກໄຮ້ທາງອອກສູ່ທະເລຂອງພະອົງ ເຊິ່ງດິນແດນນີ້ ກໍພໍທີ່ຈະເຂົ້າຫາໄດ້ຢ່າງງ່າຍດາຍທີ່ສຸດ ໂດຍຜ່ານກຸ້ງຢ່າງກຸ້ງ ອັງກິດນັ້ນເອງ.

ການຂຶ້ນຄອງລາຊະບັນລັງ ຂອງພະເຈົ້າທີບໍ ໃນປີ 1878 ຕົກເຂົ້າໃນເຫລົ່ກົນຂອງພວກອັງກິດ ທີ່ ຮຽກຮ້ອງ ໃຫ້ຍຶດໂຮບດິນແດນເຂົ້າກັນ. ຫລັງຈາກການປະລາໄຊຂອງລັດຖະປະຫານໂດຍຝ່າຍລາຊະສຳ ນັກ ປີ 1866 ເຊິ່ງເປັນເຫດໃຫ້ ອົງມຸງກຸດ ຖືກລອບສັງຫານໄປແລ້ວ ພະເຈົ້າມິນດົງ ກໍບໍ່ກ້າທີ່ຈະແຕ່ງຕັ້ງ ອົງລັດຊະທາຍາດຂອງພະອົງຂຶ້ນອີກ. ໃນບັນຍາກາດແຫ່ງຄວາມບໍ່ແນ່ນອນ, ອັນຕະລາຍຈາກຕ່າງປະເທດ ແລະການວາງແຜນລັບ, ການເມືອງຂອງລາຊະສຳນັກ ກໍຍິ່ງເຂັ້ມຂຸ້ນຮຸນແຮງຂຶ້ນ ຂະນະທີ່ພວກແບ່ງແຍກ ກໍກຽມຕົວເພື່ອຍາດແຍ່ງລາຊະບັນລັງ. ສະຖານະການຖືກພວກແບ່ງແຍກສວຍໃຊ້ ໂດຍ ມີອະດີດມະເຫສີ ອົງນຶ່ງ ຂອງພະເຈົ້າ ມິນດົງ ເປັນຜູ້ນຳພາ ຄື ພະນາງສິນພະຍຸມາຊິນ (Hsinpyumashin) ແລະລັດຖະມຸນຕີ ຄົນນຶ່ງ ຂອງ ຮະລູໂດວ (Hlutdaw) ຊື່ ເຕັງດາ ມິງຍີ (Taingda Mingyi). ພວກເຂົາຍົນຂວາຍໃຫ້ ພວກລັດຖະມຸນຕີ ເລືອກເອົາເຈົ້າຊາຍອົງຫລ້າ ຄື ເຈົ້າຊາຍທີບໍ ດ້ວຍຖືກສົ່ງເສີມຈາກ ແນວຄຶດທີ່ວ່າ ພວກ ເຂົາເອງຈະສາມາດຄວບຄຸມພະອົງໄດ້ ເມື່ອພະເຈົ້າທີບໍ ໄດ້ຮັບອະພິເສກແລ້ວ ຄູ່ຕໍ່ສູ້ຜູ້ອື່ນໆກໍຄວນຖືກກຳຈັດ ໄປແລ້ວ ພະມະເຫສີເກົ່າ ກັບ ພະທິດາຊື່ ພະນາງສຸພາຢາລັດ (Supayalat) ພະສະຫນົມອົງນຶ່ງຂອງ ພະ ເຈົ້າທີບໍ ກໍໄດ້ຄວບຄຸມນະໂຍບາຍຂອງລັດຖະບານໄວ້ທັງຫມົດ.

ລັດຖະບານອັງກິດ ໃນຢ່າງກຸ້ງ ສະແດງຄວາມແຄ້ນເຄືອງ ຕໍ່ກັບການຕໍ່ສູ້ເພື່ອການຂຶ້ນຄອງບັນ ລັງແບບນອງເລືອດຄັ້ງນີ້ ໃນຂະນະດຽວກັນກໍສວຍໂອກາດ ທະວີຄວາມກົດດັນໃສ່ລາຊະອານາຈັກ ພະມ້າ. ລັດຖະບານອັງກິດ ສົ່ງກອງທະຫານໄປຍັງ ມັນດາເລ ໂດຍອ້າງວ່າ ຄະນະຜູ້ຕາງຫນ້າອັງກິດ ຢູ່ທີ່ນັ້ນ ຕ້ອງການທະຫານອາຮັກຂາ; ປີຖັດມາ ຜູ້ຕາງໜ້າຂອງອັງກິດ ກໍຖືກຖອນອອກ, ນັ້ນເປັນສັນຍານ

ບອກເຖິງຄວາມບໍ່ຍອມຮັບ ໃນດ້ານຈິດໃຈຂອງລັດຖະບານ. ເມື່ອເຈົ້າຊີວິດທີບໍ ສົ່ງຄະນະທູດໄປພົບຂ້າ ຫລວງໃຫຍ່ຂອງອັງກິດ ຢູ່ ກັລກັດຕາ ເພື່ອຂໍຮ້ອງໃຫ້ມີການຟື້ນຟູສຳພັນທະໄມຕີກັບອີກ ແລະເພື່ອເຈລະຈາ ເລື່ອງສົນທິສັນຍາໃຫມ່, ການມາຂອງຄະນະທູດ ບໍ່ໄດ້ຮັບຄວາມສົນໃຈແມ່ນແຕ່ຫນ້ອຍດຽວ. ແຕ່ສົງຄາມ ໃນ ອັຟການິສຖານ ໄດ້ຫລຸດຜ່ອນຄວາມຫມາຍຫມັ້ນຂອງອັງກິດ ໃນການທີ່ຈະດຳເນີນການໄປໄກກວ່ານີ້ ຢູ່ໃນພະມ້າ ໄວ້ເປັນການຊົ່ວຄາວ. ຢູ່ຖ້າມກາງບັນຍາກາດທາງການເມືອງອັນຫຍຸ້ງຍາກຢ່າງນີ້ ແລະອາດ ຈະແມ່ນຍ້ອນການຍຸແຍ່ຂອງ ລັດຖະມົນຕີ ປາກໂປ້ງຜູ້ນຶ່ງຄື ກິນຫວຸນ ມິງຢີ (Kinwun Mingyi) ພະເຈົ້າທີບໍ ຈຶ່ງພະຍາຍາມຜ່ອນຜັນຮັບເອົາເອົາຄວາມ ເຫັນຂອງອັງກິດ ແລະສະແຫວງ ຫາຄວາມປອງດອງ ໂດຍ ຜ່ານການເຈລະຈາປີ 1882. ຄະນະທູດຂອງ ພະເຈົ້າທີບໍ ທວງສິດ ຂໍໃຫ້ພະມ້າ ເປັນລັດເອກະລາດ ມີສິດ ສົ່ງຣາຊະທູດໄປເຝົ້າ ພະຣາຊີນີອັງກິດ ຢູ່ລອນດອນ ແລະເມື່ອການທວງສິດ ຖືກປະຕິເສດ ກໍເລີຍຂໍຮ້ອງວ່າ ຢ່າງຫນ້ອຍໃຫ້ມີຮ່າງສົນທິສັນຍາ ລະຫວ່າງສອງລັດ, ເພື່ອເປັນການຕອບແທນ ພະເຈົ້າທີບໍ ໄດ້ຕ້ອນຮັບ ຄະນະຜູ້ແທນຂອງອັງກິດໃນລາຊະວັງ ຂອງພະອົງ ໂດຍບໍ່ຕ້ອງປົດ ເກີບ. ອັງກິດ ບໍ່ໄດ້ຜ່ອນຜັນໃຫ້ເພາະສະ ເໜີໃຫ້ພຽງສັນຍາພະລາຊະໄມຕີ ແລະສັນຍາທາງການຄ້າ ກັບ ລັດຖະບານອິນເດຽ ອີກສະບັບນຶ່ງຕ່າງ ຫາກເທົ່ານັ້ນ. ເມື່ອຖືກປະຕິເສດເລື່ອງຄວາມສະເໜີພາບ ເຊັ່ນນີ້, ພະມ້າຈຶ່ງໄດ້ຖອນຄະນະທູດຂອງຕົນຄືນ ແລະໃນປີ 1883 ລັດຖະບານຂອງພະເຈົ້າທີບໍ ກໍໄດ້ດຳ ເນີນນະໂຍບາຍສະແຫວງຫາພັນທະມິດ ເພື່ອຖ່ວງ ດຸນອຳນາດ ໂດຍສົ່ງຄະນະທູດໄປ ຢູລົບ ເພື່ອຊອກຫາການຮັບຮອງແບບສົມບູນ ແລະ ການຊ່ອຍເຫລືອ ຈາກລັດຖະບານຝຣັ່ງ.

ຄວາມເຄັ່ງຕຶງລະຫວ່າງ ຝຣັ່ງກັບອັງກິດ ແມ່ນຫມາກຜົນອັນນຶ່ງ ເຊິ່ງບໍ່ໄດ້ແມ່ນໂດຍ ເຈດຕະນາ ຂອງຝຣັ່ງ ພໍເທົ່າໃດ ຄືດັ່ງທີ່ຝ່າຍອັງກິດມັກຄຶດ ແຕ່ມັນແມ່ນຫມາກຜົນແຫ່ງຄວາມພະຍາຍາມ ຂອງ ພະມ້າເອງ ທີ່ໃຊ້ນະໂຍບາຍຖ່ວງດຸນອຳນາດ. ຢ່າງໃດກໍຕາມ ຄວາມເຫັນຂອງອັງກິດ ຊົ່ງເປັນຫນ້າເຊື່ອ ຖືຫລາຍຂຶ້ນ ເມື່ອຝຣັ່ງ ເຂົ້າຍຶດຄອງຫວຽດນາມເຫນືອ ແລະ ກາງ, ເຖິງຢ່າງນັ້ນ ຝຣັ່ງກໍປະຕິເສດ ການຫນຸນຫລັງພະມ້າ, ຄະນະທູດສັນຖະວະໄມຕີຂອງພະເຈົ້າທີບໍ ທີ່ໄປປາຣີ ປະສົບຄວາມສຳເລັດບໍ່ຫລາຍ ໄປກວ່າການຟື້ນຟູ ສົນທິສັນຍາທາງການຄ້າອັນໄຮ້ຄ່າ ຂອງປີ1873. ໂດຍສະເພາະໃນປີ 1884 ຝຣັ່ງໄດ້ ປະຕິເສດການລົງນາມໃນຖະແຫລງການທີ່ວ່າ ພວກຕົນອາດຈະຊ່ອຍເຫລືອພະມ້າ ຖ້າຫາກ ພະມ້າ ຖືກ ຮຸກຮານໂດຍມະຫາອຳນາດທີສາມ. ໃນຕົ້ນປີ 1885 ເມື່ອ ກິນຫວຸ່ນມິງຢີ ໄດ້ພະຍາຍາມ ຢ່າງເອົາເປັນ ເອົາຕາຍ ຊອກຫາຄວາມຮັບປະກັນການສະຫນັບສະຫນຸນຂອງຝຣັ່ງ, ແຕ່ສິ່ງດຽວ ທີ່ນາຍົກລັດຖະມຸນຕີ ຈູນລ ແຟຣີ ຍິນຍອມໃຫ້ ແມ່ນຈົດຫມາຍຄຳຫມັ້ນສັນຍາ ເລື່ອງການສົ່ງອາວຸດໄປໃຫ້ ໂດຍທາງບົກຈາກ ອາວຕັງເກຣ ຖ້າຫາກວ່າ "ເລື່ອງນີ້ ໄດ້ຖືກພິຈາລະນາວ່າ ສອດຄ່ອງ ກັບຜົນ ປະໂຫຍດຂອງພວກເຮົາ". ບຸກຄົນເອກະຊົນຝຣັ່ງເອງ ໄດ້ກ້າວໄປໄກກວ່ານັ້ນ ດ້ວຍຄວາມຕື່ນເຕັ້ນນຳການ ສຳປະທານສ້າງທາງລົດໄຟ ແລະການທະນາຄານ ແລະ ເກືອບໄດ້ສິດຜູກຂາດການຂຸດຄົ້ນບໍ່ແກ້ວພີລາ ຈາກພະເຈົ້າທີບໍ. ໂດຍສະເພາະ ກົງສຸນຝຣັ່ງ ຢູ່ເມືອງມັນດາເລ ຊື່ ເອັມ ຮາດສ (M.Hass) ໄດ້ເຂົ້າຮ່ວມ ໂດຍການເຫັນດີເຫັນງາມຈາກ ປາຣີ ໃນການສູ້ຄະດີ ກັບພະມ້າ ເລື່ອງກ່ຽວກັບບໍລິສັດການຄ້າ ບອມເບ - ພະມ້າ ຂອງອັງກິດ ໂດຍເຊື່ອ ວ່າ ຝຣັ່ງອາດຈະປະສົບຄວາມສຳເລັດມີຜົນປະໂຫຍດຈາກ ໄມ້ສັກຂອງພະມ້າ. ເດືອນສິງຫາ 1885 ພໍແຕ່ຈົດຫມາຍຂອງ ທ່ານແຟຣີ ສະບັບ ເດືອນມັງກອນ ຮູ້ໄປ ຮອດຫູອັງກິດ ບໍລິສັດການຄ້າບອມເບ - ພະມ້າ (Bombay-Burma Trading Corporation) ຖືກປັບໃຫມ ເປັນມູນຄ່າເຖິງ 73,333 ປອນ ໂດຍສະພາ ຣະລຸດໂດວ ເມື່ອພົບວ່າມີຄວາມຜິດຖານຈ່າຍຄ່າສຳປະທານຕ່ຳກວ່າກຳນົດ ສຳລັບໄມ້ສັກທີ່ເອົາອອກຈາກ ປ່າໃນເຂດ ເມືອງມັນດາເລ ເຫນືອຕອງອູ. ເຫດການ ຕໍ່ມາ ເກີດຈາກເລື່ອງຕ່າງໆທີ່ຂະຫຍາຍໂຕໂດຍບັງ ເອີນແບບດຽວກັນ ຈາກ ສົນທິສັນຍາ ມັນດາເລ,ເຮັດໃຫ້ ອັງກິດໄດ້ຮັບຜົນປະໂຫຍດທາງການຄ້າ ແລະຈາກ ການຂ່ວງເສັງຢ່າງເອົາເປັນເອົາຕາຍ ລະຫວ່າງ ຝຣັ່ງ ກັບ ອັງກິດ ລຸນຫລັງການຍຶດຄອງເມືອງຕົງແກງ (ຕັງເກຣ)ໄດ້. ລັດຖະບານແນວເສລີຊຸດຕ່ຳໆມາ ໃນ ລອນດອນ ບໍ່ໄດ້ມີການເຄື່ອນໄຫວໃດໆ ຍ້ອນການພິພາດ

ກັບທາງເສດຖະກິດເພື່ອຍຶດໂຮບດິນແດນ ມັນດາເລ ເຊິ່ງພວກສະແຫວງຜົນປະໂຫຍດທາງການຄ້າ ອັງກິດ ໃນຢ່າງກ້ຽ ສະເຫນີຂຶ້ນ. ໂດຍສະເພາະ ເມື່ອກອງທັບ ອິນເດຽຂອງອັງກິດ ເມົາມົວຢູ່ກັບການສູ້ຮົບໃນບ່ອນ ອື່ນ. ແຕ່ໃນທ້າຍໆປີ 1886 ກອງທັບທັງຫລາຍຢູ່ລ້າໆບໍ່ມີການສູ້ຮົບ, ລັດຖະບານຫົວຮີດເດີ່ມ ແຕ່ເປີດ ກ້ວາງກວ່າພວກຫົວເສລີນິຍົມ ເປັນຝ່າຍກຳອຳນາດແລ້ວ ທັງຄວາມເກງກົວດ້ານເສດຖະກິດ ແລະການ ເມືອງຕ່ໍຝຣັ່ງ ກໍໄດ້ເລັ່ງບີບໃຫ້ພວກເຂົາກ້າວຕ່ໍໄປ. ພະເຈົ້າທິບ ຖືກສະເຫນີໃຫ້ຮັບຄຳຂາດຢູ່ ສາມເລື່ອງ ຄື: (1) ກໍລະນີ ໄມ້ສັກ ຍົກໃຫ້ຂ້າຫລວງໃຫຍ່ ສູງສຸດຂອງອັງກິດ ປະຈຳຢ່າງກຸງ ເປັນຜູ້ຕັດສິນ, (2) ໃຫ້ແຕ່ງ ຕັ້ງ ຜູ້ຕາງ ຫນ້າຂອງອັງກິດ ປະຈຳຢູ່ ມັນດາເລ ພ້ອມດ້ວຍທະຫານຍາມຜູ້ນຶ່ງ ແລະ ໄດ້ຮັບອະນຸຍາດ ໃຫ້ເຂົ້າເຝົ້າພະເຈົ້າຊີວິດໄດ້ໂດຍກົງ ຢ່າງບໍ່ຖອດເກີບ ແລະ (3) ອັນຮ້າຍກວ່າຫມູ່ທັງເປັນການຫມິ່ນປະ ຫມາດຕ່ໍາຊ້ໍາທີ່ສຸດ ກໍແມ່ນ ໃຫ້ການຕິດຕ່ໍພົວພັນລະດັບຕ່າງປະເທດຂອງພະມ້າ ທັງຫມົດ ຢູ່ພາຍໃຕ້ການ ຄວບຄຸມຂອງລັດຖະບານ ອິນເດຽ.

ຝຣັ່ງໄດ້ພະຍາຍາມຫລຸດຜ່ອນວິກິດການລົງ ໂດຍສະເຫນີໃຫ້ ແບ່ງເຂດອິດທິພົນຂອງ ອັງກິດ ແລະຝຣັ່ງ ແຕ່ອັງກິດ ບໍ່ຮັບຂໍ້ສະເຫນີໃດໆ. ຫວຸ່ນ ມິງຢີ ເລັ່ງລັດຂໍຄຳຕອບແບບປະນີປະນອມ ສຳລັບຂໍ້ສະ ເຫນີສຸດທ້າຍນີ້ ແຕ່ກໍຖືກລົບລ້າງໂດຍ ແຕັງດະ ມິງຢີ ແລະມະເຫສີ ສຸພາຢາລັດ (Supayalat) ເຊິ່ງບໍ່ຖືເອົາ ເລື່ອງນີ້ ເປັນເລື່ອງສຳຄັນ. ກົງກັນຂ້າມ ຊ້ໍາມີຄຳຕອບອັນແຂງກະດ້າງສົ່ງຄືນມາ. ມາເຖິງກາງ ເດືອນ ພະຈິກ ເມື່ອກາຍກຳນົດເວລາຊາວມື້ ສຳລັບຕອບຄຳຂາດໄປແລ້ວ ກອງທະຫານຂອງອັງກິດ ກໍຟ້າວມຸ່ງ ຫນ້າໄປທາງເຫນືອ ແລະຍຶດເອົາ ມັນດາເລ ໃນຄືນຕ່ໍມາ, ການບຽດຍຶດເອົາພາກເຫນືອພະມ້າ ໄດ້ຖືກ ປະກາດອອກ ໃນວັນທີ 1 ມັງກອນ 1886 ອັນໄດ້ເຮັດໃຫ້ລາຊະວົງກົງບອງ ແລະເອກະລາດຂອງ ພະມ້າ ເຖິງກາລະອາວະສານ.

ຄວາມຈິງແລ້ວ ສົງຄາມລະຫວ່າງ ອັງກິດ ກັບພະມ້າ ຄັ້ງທີ 3 ລະເບີດຂຶ້ນແທ້ໆ ຫລັງຈາກທີ່ ມັນ "ໄດ້ຍຸຕິລົງແລ້ວ" ຕ່າງຫາກ, ເຖິງແມ່ນວ່າກອງທັບຂອງເຈົ້າຊີວິດ ໄດ້ແຕກສະຫລາຍໄປ ແບບຂາດ ການຊີ້ ນຳຢູ່ຂັ້ນສູນກາງກໍຕາມ ແຕ່ການຕ່ໍຕ້ານໄດ້ລະເບີດຂຶ້ນໃນເຂດແດນເກ່ົາ ຂອງເຈົ້າຊີວິດ ແລະ ບໍ່ດົນກໍຂະ ຫຍາຍເຂົ້າໄປໃນພະມ້າພາກໃຕ້ ຂອງອັງກິດນຳ. ພ້ອມກັບການເນລະເທດເຈົ້າຊີວິດ ແລະ ການຫລົ້ມຈົມ ຂອງ ຣະລຸໂດວ, ລັດຖະບານຂອງເຈົ້າຊີວິດຈຶ່ງຫລົ້ມຈົມໄປນຳ ແຕ່ອຳນາດບໍ່ໄດ້ຖືກໂອນໄປໃຫ້ ອັງກິດໃນທັນ ທີ. ພວກນາຍທະຫານເກ່ົາ ແລະພະສົງອົງຄະເຈ້ົາ ຢ້ານກົວການຮຸກຮານ ພະພຸທະສາສະຫນາ ຈາກຝ່າຍ ປົກຄອງຕ່າງຊາດ ກັບພວກທີ່ອ້າງຕົນວ່າເປັນຜູ້ສືບເຊ້ືອສາຍເຈ້ົາ ກໍໄດ້ຮັບການຮ່ວມມື ຈາກພວກ ໂສບໍ ລັດສານ (Shan sawbwa) ໃນການຄັດຄ້ານ ການຄຸ້ມຄອງຂອງອັງກິດ. ການຂາດການປະສານງານ ຂອງພວກເຂົາ ເຮັດໃຫ້ການປາບປາມເປັນໄປຢ່າງງ່າຍດາຍ ແຕ່ມັນກໍຍັງເປັນວຽກງານ ອັນຍິ່ງໃຫຍ່ຢູ່. ມາເຖິງເດືອນກຸມພາ 1887 ກຳລັງທະຫານກວ່າ ສີ່ຫມື່ນປາຍ ແລະຕຳຫລວດ ອິນເດຽ ອີກຈຳນວນນຶ່ງ ໄດ້ອອກສູ່ສະຫນາມຮົບ ໃນຂະນະທີ່ກອງໂຈນກະຫຣ່ຽງຄຣິດສ໌ກ ຖືກລະດົມມາເພື່ອຊ່ວຍກຳຈັດ ພວກທີ່ ລຸກຮືຂຶ້ນຢູ່ພາກໃຕ້. ເຫດການຮ່ວມສະໄຫມເລື່ອງນີ້ ມີຊື່ທີ່ເອີ້ນວ່າ "ການສ້າງຄວາມ ສະຫງົບໃນພະມ້າ" ແຕ່ທີ່ແທ້ແລ້ວ ກໍຕັ້ງແມ່ນການນອງເລືອດໃສ່ກັນຫລາຍກວ່າ ການກຳຈັດຍາດ ພີ່ນ້ອງຂອງພະເຈ້ົາຊີວິດ ທີ່ບໍ່ອີກ, ຂະນະທີ່ກອງທະຫານອັງກິດຈູດເຜົາບ້ານເຮືອນ ແລະເຊ່ັນຂ້າປະຊາຊົນທີ່ພວກເຂົາເອີ້ນວ່າ ຂະບົດ ຢ່າງຫລວງຫລາຍນັ້ນ ການຕ່ໍຕ້ານຄ່ອຍໆຫມົດໄປ ກອງທະຫານອັງກິດ ທີ່ຖືກສົ່ງເຂົ້າໄປໃນເຂດມ່ໍຊາຍ ແດນ ເລີ່ມໄດ້ຮັບຄວາມໄວ້ເນ້ືອເຊ່ືອໃຈຈາກເຊ້ືອສາຍເຈ້ົາເກ່ົາ. ມາເຖິງປີ 1895 ອຳນາດທາງທະຫານ ຂອງອັງກິດ ກໍບັນລຸຜົນສຳເລັດ ດ້ວຍການສະຖາປະນາອຳນາດຄວບຄຸມ ຢ່າງແທ້ຈິງ ຢູ່ເຫນືອດິນແດນ ພະມ້າທັງຫມົດ ຊຶ່ງໃນນັ້ນ ມີການກຳນົດເຂດແດນໃຫມ່ ແລະໃນທີ່ສຸດ ກໍນຳໄປເຖິງການຍຸຕິຄວາມເຄ່ັງຕຶງ ແລະຄວາມຂັດແຍ່ງອັນຍາວນານ ມາເຖິງ 60 ປີ.

## ລາຊະອານາຈັກສະຫຍາມ

ຄວາມກົດດັນອັນຫນັກຫນ່ວງທີ່ສຸດ ຂອງຈັກກະພັດນິຍົມຕາເວັນຕົກ ແຜ່ມາເຖິງສະຫຍາມ ປະມານ ນຶ່ງຫາສອງທົດສະວັດ ລຸນຫລັງພະມ້າ ແລະ ຫວຽດນາມ ຖືວ່າເປັນການໃຫ້ເວລາພິເສດ ແກ່ ສະຫຍາມ. ລາຊະອານາຈັກ ຕ້ອງການເວລາພິເສດ, ນັ້ນແມ່ນສິ່ງຮີບດ່ວນທີ່ສຸດ ເພື່ອແກ້ໄຂບັນຫາ ການເມືອງພາຍໃນ. ພະເຈົ້າຊີວິດ ຈຸລະຈອມເກົ້າ ລັດຊະການທີ 5 (1868-1910) ມີພະຊົນມາຍຸ ໄດ້ 15 ພັນສາ ເມື່ອຂຶ້ນຄອງລາຊະບັນລັງ ແລະພະອົງກໍຊົງດຳລົງຢູ່ຢ່າງໄຮ້ອຳນາດ ເປັນເວລາ 15 ປີ ພາຍໃຕ້ ກຳມືຂອງຜູ້ສຳເລັດລາຊະການແທນພະອົງ ຄື ເຈົ້າພະຍາສີສຸຣິຍະວົງ (ຊ່ວງ ບຸນນາກ). ພະກະສັດອົງ ເຍົາໄວ ສະເດັດປະພາດຕ່າງປະເທດ ເຊັ່ນ ໄປຢາມຫມູ່ເກາະດອນອິນດີສ ຂອງ ເນເທີແລນ, ສິງກະໂປ, ພະມ້າ ແລະ ອິນເດຽ ຈາກນັ້ນກໍຊົງຮຽກເອີ້ນ ເອົາຄົນຫນຸ່ມໆມາເປັນທີ່ເປີກສາ ເຊິ່ງສ່ວນໃຫຍ່ ແມ່ນຜູ້ທີ່ ໄປຮ່ຳຮຽນມາແຕ່ປະເທດຕາເວັນຕົກ. ເມື່ອພະອົງໄດ້ຮັບອະພິເສກເປັນກະສັດ ຢ່າງສົມບູນໃນປີ 1873 ພະອົງກໍລົງມືປະຕິຮູບສິ່ງພື້ນຖານສຳຄັນຫລາຍຢ່າງ ດ້ວຍການຊ່ວຍເຫລືອ ຂອງພວກທີ່ເປີກສາເຫລົ່ານັ້ນ ເຊັ່ນ ປະກາດເລີກທາດ, ປ່ຽນແປງລະບົບການພິຈາລະນາຄະດີ ແລະການຄັງ ແລ້ວກໍສະຖາປະນາ ສະພາແຫ່ງລັດ ແລະສະພາອົງຄະມຸນຕີ ເພື່ອສະຫນອງຄຳແນະນຳແກ່ພະອົງ. ການປ່ຽນແປງດັ່ງກ່າວ ກໍ່ໃຫ້ເກີດການຄັດຄ້ານຢ່າງຮຸນແຮງ. ເຈົ້າອຸປະຣາດ ຄື ພະຍາວິໄຊຊານ ທີ່ໄດ້ຮັບການສະເໜີໃຫ້ເປັນ ລັດຊະທາຍາດໃນປີ 1868 ໂດຍ ພະຍາສີສຸຣິຍະວົງ ທີ່ຄາດຄະເນວ່າ ອີກບໍ່ດົນ ເຈົ້າຟ້າຈຸລາລົງກອນ ຄົງຈະສ້ຽງພະຊົນ ເພາະພະອົງຊົງເຈັບປ່ວຍຢູ່ແລ້ວ ເຈົ້າອຸປະຣາດເອງ ກໍຮູ້ສຶກສະດຸ້ງຕໍ່ການເຄື່ອນໄຫວ ທາງກຳລັງທະຫານ ບັນຊາການໂດຍເຈົ້າຊີວິດ ກັບຜູ້ສະຫນັບສະຫນູນພະອົງ. ດ້ວຍຄວາມຫ່ວງໃຍໃນຊາ ຕາກຳຂອງຕົນເອງ ພະຍາວິໄຊຊານຈຶ່ງໂຕນຫນີໄປຢູ່ໃນສະຖານກົງສຸນອັງກິດ ແຕ່ຕົ້ນປີ 1875. ກົງສຸນ ອັງກິດ ແລະຝຣັ່ງ ຕ່າງກໍໄດ້ເຄື່ອນໄຫວເກີນຄຳສັ່ງ ລັດຖະບານຂອງຕົນ ໂດຍພະຍາຍາມສວຍໂອກາດ ຈາກເຫດການນັ້ນ ເພື່ອເຮັດໃຫ້ອິດທິພົນຂອງຕົນໃນລາຊະອານາຈັກ ເຂັ້ມແຂງຂຶ້ນ, ດັ່ງນັ້ນການຢູ່ລອດ ຂອງສະຫຍາມ ກໍເລີຍຖືກກະທົບກະເທືອນໄປລະຍະນຶ່ງ ແຕ່ກົງສູນທັງສອງ ກໍຖືກລັດຖະບານປະເທດຕົນ ເອງຍັດຍວາງ ໂດຍປະຕິເສດລົງມືກະທຳການໃດນຶ່ງ ໃນຂະນະທີ່ພະເຈົ້າຊີວິດ ພວມທ້ອນໂຮມການສະ ຫນັບສະຫນຸນ. ປາກົດວ່າ ພະເຈົ້າຊີວິດຈຸລະຈອມເກົ້າ ຜ່ານພົ້ນວິກິດການນັ້ນໄປໄດ້ ພໍພຽງແຕ່ດ້ວຍການ ໃຫ້ແຕ່ຄຳຫມັ້ນສັນຍາບາງຢ່າງເທົ່ານັ້ນ, ອີກສິບປີຕໍ່ມາ ການປະຕິຮູບທີ່ດຳເນີນການມາແຕ່ກ່ອນໆ ຖືກ ເລີກລົ້ມໄປ ແລະບໍ່ໄດ້ມີການປະຕິຮູບໃຫມ່ອັນໃດອີກ, ມາຮອດລະຫວ່າງກາງຊຸມປີ 1880 ຂະນະທີ່ ພວກ ອາມາດມຸນຕີຮຸ່ນພະບິດາຂອງພະອົງ ເລີ່ມຫາຍຫນ້າຈາກວົງຊີວິດສັງຄົມໄປ ພະຈຸນລະຈອມເກົ້າ ຈຶ່ງສາ ມາດລົງມືດຳເນີນແຜນປະຕິຮູບຂອງພະອົງ. ເພາະວ່າ ຄອບຄົວພວກຂຸນນາງເຊື້ອເຈົ້າ ສ່ວນຫລາຍ ບໍ່ທັນຕື່ນຕົວສົ່ງລູກເຕົ້າໄປໂຮງຮຽນສະໄຫມໃຫມ່, ກະໂຕບັນດາອ້າຍນ້ອງຂອງ ເຈົ້າຊີວິດເອງ (ພະອົງມີ ອ້າຍເອື້ອຍນ້ອງຕ່າງແມ່ທັງຫມົດ ຊາວເຈັດພະອົງ) ລ້ວນແຕ່ເປັນຜູ້ທີ່ໄດ້ຮັບການສຶກສາດີທີ່ສຸດ ໃນຮຸ່ນ ນັ້ນ. ທຳອິດພວກເພິ່ນແຕ່ລະຄົນໄດ້ຮັບການສັບຊ້ອນຮັບຜິດຊອບຂັ້ນກົມກອງ ຕໍ່ມາກໍເປັນເຈົ້າກະຊວງ. ໃນປີ 1885 ຫລັງຈາກເລັ່ງລັດໃຫ້ບັນດາຍາດວົງອ້າຍນ້ອງຂອງພະອົງ ແລະບຸກຄົນຂີ້ໃຈຮ້ອນ ທີ່ສະຫນັບ ສະຫນຸນພະອົງບາງຄົນ ໄດ້ເຂົ້າປະຈຳການຫມົດແລ້ວ ພະເຈົ້າຊີວິດກໍລົງມືຈັດຕັ້ງລັດຖະບານຄືນໃຫມ່, ຈັດແບ່ງເປັນກະຊວງ ໂດຍວາງໂຄງສ້າງໄປຕາມຫນ້າວຽກ. ລະບົບຈັດຕັ້ງໃຫມ່ ເລີ່ມນຳໃຊ້ເມື່ອເດືອນ ມີນາຄົມ ປີ 1888 ໂດຍບົ່ງຊີ້ເອົາລັດຖະມຸນຕີຫນຸ່ມໆຫລາຍຄົນ ເຊິ່ງກໍລ້ວນແຕ່ເປັນ ອ້າຍນ້ອງຂອງພະອົງ ຫມົດທຸກຄົນ, ເຊີນທຸກຄົນເຂົ້າຮ່ວມປະຊຸມຄະນະລັດຖະມຸນຕີ ກ່ອນທີ່ກະຊວງຂອງ ແຕ່ລະທ່ານ ຈະຖືກ ປະກາດອອກຢ່າງເປັນທາງການ. ອີກສີ່ປີຕໍ່ມາ ກົມກອງຕ່າງໆກໍໄດ້ຖືກຈັດຕັ້ງຄືນໃຫມ່, ກົມກອງໃຫມ່ໆ

ເກີດຂຶ້ນ ແລະຜູ້ຈະເຂົ້າຮັບຕຳແໜ່ງກໍໄດ້ຮັບການຝຶກອົບຮົມ ສຳລັບເປັນຄະນະລັດຖະບານໃໝ່ ເຊິ່ງໃນທີ່ສຸດ ກໍໄດ້ເຂົ້າປະຕິບັດໜ້າທີ່ ເມື່ອຕົ້ນເດືອນເມສາ ປີ1892.

ໃນບັນດາການປ່ຽນແປງທັງຫມົດ ອັນສຳຄັນກວ່າໝູ່ ທີ່ເກີດຕໍ່ມາ ພ້ອມໆກັບການຈັດຕັ້ງຄືນໃໝ່ນັ້ນ ແມ່ນການຂະຫຍາຍວົງ ແລະການຍຶດແຜ່ອຳນາດຄວບຄຸມຫົວເມືອງ ແລະເຂດຫົວເມືອງຫ່າງໄກ. ໂດຍກ່າຍເອົາຮູບແບບຂອງບາງລະບົບ ຕາມຕົວແບບຂອງອັງກິດໃນອິນເດຽ ແລະພະມ້າ ສະຫຍາມ ໄດ້ໂຮມເອົາແຂວງຕ່າງໆເຂົ້າເປັນມົນທົນ (ເຂດ) ຊຶ່ງຄວບຄຸມໂດຍຂ້າຫລວງຄົນນຶ່ງ ຊຶ່ງໂດຍທົ່ວໄປແລ້ວ ກໍມັກຈະແມ່ນເຊື້ອເຈົ້າ ອ້າຍນ້ອງຂອງເຈົ້າຊີວິດນັ້ນເອງ. ໄດ້ມີການແຕ່ງຕັ້ງຂ້າຫລວງປະຈຳຫລວງພະບາງ, ຊຽງໃໝ່, ຜູເກັດ ແລະ ພະຕະບອງ ໃນຊຸມປີ 1870. ແລະຕໍ່ມາຢູ່ຫນອງຄາຍ, ຈຳປາສັກ, ນະຄອນລາຊະສີມາ (ໂຄຣາດ) ແລະອຸບົນ ໃນລະຫວ່າງຊຸມປີ 1880. ຢ່າງໃດກໍດີ, ອຳນາດ ແລະກິດຈະກຳຂອງຂ້າຫລວງປະຈຳມົນທົນໄດ້ເກີດມີຕົວຕົນແທ້ໆ ກໍແຕ່ໃນລະຫວ່າງຊຸມປີ 1890 ພີ ເມື່ອບັນດາຂ້າຫລວງເຫລົ່ານັ້ນ ເລີ່ມບັງຄັບໃຫ້ເລັ່ງລັດການປະຕິຮູບ ໂດຍການຕັ້ງກອງທະຫານທ້ອງຖິ່ນ ແລະວາງລະບຽບບໍລິຫານອຽກການຄັງ ແລະການຕັດສິນຄະດີ. ໃນເຂດກ່ຽວຂ້ອງສ່ວນຫລາຍ ລະບົບໃໝ່ເປັນຫລັກໝາຍແຫ່ງການເລີ່ມຕົ້ນການພັດທະນາທີ່ສຳຄັນ ໃນຂະນະທີ່ອຳນາດຂອງບາງກອກ ເຊິ່ງເບິ່ງຄືກັບອຳນາດຂອງປະເທດເຈົ້າຂອງອານານິຄົມໃນລະຍະດຽວກັນ ໄດ້ຂະຫຍາຍອອກໄປວົງນອກ ແລະຫົວເມືອງ ໂດຍກືນເອົາຫົວເມືອງປະເທດສະລາດເກົ່າແລະເຮັດໃຫ້ການຄວບຄຸມດ້ານການບໍລິຫານ ເປັນປຶກແຜ່ນອັນດຽວກັນ. ແຕ່ຢູ່ ຫລວງພະບາງ ແລະຈຳປາສັກ ມັນຫລ້າສວາຍເກີນໄປແລ້ວ, ຂະນະທີ່ຄວາມເຮັ່ງຮີບຫມາຍປອງຂອງຈັກກະພັດຝຣັ່ງຕໍ່ສະຫຍາມ ໄດ້ທະວີແຮງຂຶ້ນຢ່າງໄວວາ ຕະຫລອດຊຸມປີ 1880. ຝຣັ່ງເລືອກທີ່ຈະເບິ່ງຄວາມພະຍາຍາມຂອງສະຫຍາມ ໃນການປັບປຸງການຄວບຄຸມ ຫົວເມືອງຂຶ້ນ ທີ່ຢູ່ຮອບວົງນອກ ແລະການກຳຈັດຄວາມອຸ່ນວາຍທີ່ພວກຫໍ່ກອບຢູ່ໃນລາວ ວ່າເປັນລັດທິຈັກກະພັດນິຍົມແບບໃໝ່ ເຊິ່ງທ້າທາຍຕໍ່ສິດຄອບຄອງຂອງຫວຽດນາມ ຕໍ່ຫົວເມືອງລາວທັງຫລາຍ ທາງຕາເວັນອອກຂອງແມ່ນ້ຳຂອງ. ຝຣັ່ງໃຊ້ເລ່ຫລ່ຽມອ້າງສິດເໜືອດິນແດນ ແລະແຕ່ງຕັ້ງເຈົ້າໜ້າທີ່ ໄປປະຈຳການ ທັງຍແຍ່ໃຫ້ເກີດເຫດການເກາະຜິດກັນ. ພວກຝຣັ່ງສົ່ງກອງກຳລັງທະຫານຫລາຍຊຸດເຂົ້າໄປ ໃນເຂດລ່ອງແມ່ນ້ຳຂອງພາກໃຕ້ ແລະພາກກາງ ເຊິ່ງຢູ່ທີ່ນັ້ນ ພວກເຂົາໄດ້ພົບກັບການຕໍ່ຕ້ານ ຢ່າງຫນຽວແໜ້ນ ຈາກກອງທະຫານສະຫຍາມ. ເກີດເຫດການເຄັ່ງຮ້ອນໃນ ເດືອນກໍລະກົດ1893, ກອງຮ້ອຍປືນໃຫຍ່ ຂອງສະຫຍາມ ຢູ່ປາກແມ່ນ້ຳເຈົ້າພະຍາ ໄດ້ລະດົມຍິງເຮືອປືນຝຣັ່ງສອງລຳ ທີ່ລ່ອງລ້ຳຂຶ້ນໄປຕາມ ແມ່ນ້ຳເຈົ້າພະຍາມຸ່ງສູ່ ບາງກອກ. ຍ້ອນຂາດກຳລັງເພື່ອຕີຖອຍກຳລັງປົດລ້ອມນ່ານນ້ຳຂອງຝຣັ່ງອອກໄປ ຫລື ເພື່ອຕໍ່ຕ້ານກຳລັງທະຫານ ຊຶ່ງຂະນະນັ້ນກຽມຕົວດີແລ້ວຢູ່ທີ່ຊາຍແດນລາວ, ຝ່າຍສະຫຍາມ ຈຶ່ງບໍ່ມີທາງເລືອກຢ່າງອື່ນ ນອກຈາກຍອມຮັບຄຳຂາດຂອງຝຣັ່ງ ທີ່ບັງຄັບໃຫ້ຍອມຍົກດິນແດນລາວທັງຫມົດ ທາງຝັ່ງຊ້າຍຂອງແມ່ນ້ຳຂອງ ແລະທົດແທນຄ່າເສຽຫາຍຈຳນວນມະຫາສານໃຫ້ຝຣັ່ງ.

ຄວາມຢູ່ລອດເປັນເອກະລາດຂອງສະຫຍາມ ຕະຫລອດລະຍະນັ້ນ ແມ່ນຫມາກຜົນແຫ່ງການຊ່ວງເສັ້ງຊັ້ນຮຸນແຮງເຕີບ ລະຫວ່າງຝຣັ່ງ ກັບອັງກິດ. ຕ່າງຝ່າຍຕ່າງກໍຫ່ວງໃຍ ບໍ່ຕ້ອງການໃຫ້ເຂດແດນຕິດຈອດກັນ ຫລືບໍ່ຍອມໃຫ້ອີກຝ່າຍນຶ່ງໄດ້ທ່າດີກວ່າ. ບາງກອກສວຍໃຊ້ການຊ່ວງເສັ້ງກັນດັ່ງກ່າວ ໃຫ້ເປັນປະໂຫຍດ ແລະໃຫ້ສະຫຍາມ ໄດ້ກາຍເປັນສູນກາງ ສຳລັບການຖ່ວງດຸນອຳນາດຂອງປະເທດທັງສອງ. ສິ່ງທີ່ຝຣັ່ງແລະອັງກິດ ສາມາດຕົກລົງກັນໄດ້ດີທີ່ສຸດ ແມ່ນການປະກັນເອກະລາດແຫ່ງດິນແດນຕາມລ່ອງນ້ຳເຈົ້າພະຍາໃນປີ 1896. ແຕ່ກໍຍັງມີຄວາມສົງໄສໃນຊາຕາກຳແຫ່ງການປົກຄອງຂອງສະຫຍາມ ເໜືອກົ່ວດອນມາເລ, ເຂດແຂວງພາກຕາເວັນອອກສຽງໃຕ້ ຕິດໆກັບກຳພູຊາ ແລະດິນແດນທັງຫມົດ ທີ່ໃນປະຈຸບັນ ເປັນພາກຕາເວັນອອກສຽງເໜືອຂອງໄທ. ການທີ່ບາງກອກ ສາມາດຮັກສາດິນແດນ ທີ່ກ່າວຂ້າງເທິງເກືອບທັງຫມົດໄວ້ໄດ້ນີ້ ກໍດ້ວຍການບັງເອີນ ຖືກຈັງຫວະຄວາມໂຊກດີ, ການທັນປະເທດເປັນທັນສະໄຫມທັນການ ແລະພິກໄຫວ ດ້ານການທູດເຂົ້າກັນເທົ່ານັ້ນ.

ໂດຍອາໄສຄວາມສາມາດທາງການທູດ ແບບສ່ວນພະອົງຂອງພະເຈົ້າຊີວິດ ກັບກະສັດອື່ນໆ ແລະລັດຖະບານຕ່າງໆໃນຢູຣົບ ແລະໂດຍອາໄສການຕິດຕໍ່ມື້ຕໍ່ມື້ລະຫວ່າງກົງສູນ ກັບສະຖານທູດ ເຊິ່ງ ເລື່ອງນີ້ ຢູ່ໃນຄວາມຮັບຜິດຊອບຂອງ ພະຍາເທວະວົງ ຜູ້ເປັນລັດຖະມຸນຕີ ກະຊວງການຕ່າງປະເທດ ມາ ກວ່າ 40 ປີ. ສະຫຍາມໄດ້ປູກຝັງ ສ້າງຊື່ສຽງໂດ່ງດັງໄປເຖິງຕ່າງປະເທດ ໃນເລື່ອງຄວາມຮັບຜິດຊອບ ແລະຄວາມປາຖະຫນາຢາກປັບແປງຕາມຄວາມຮຽກຮ້ອງຂອງປະເທດຕາເວັນຕົກ ແລະເພື່ອປະຕິຮູບ ໄປຕາມແບບແຜນຕາເວັນຕົກ. ຮູບພາບອັນນັ້ນ ສ່ວນນຶ່ງຍັ່ງຍືນຢູ່ໄດ້ ຍ້ອນຄວາມສະຫລາດຫລັກແຫລມ ຂອງທີ່ເປີກສາຕ່າງປະເທດໃນລັດຖະບານສະຫຍາມ ຄື ມີຄົນອັງກິດໃນກະຊວງການຄັງ, ຄົນຝຣັ່ງ ໃນກະ ຊວງຍຸຕິທັມ, ຄົນເດັນ ມາກຣ໌ ໃນສະຖານີຕຳຫລວດປະຈຳແຂວງ ແລະຄົນເຢຣລະມັນ ໃນກົມທາງລົດໄຟ. ບຸກຄົນເຫລົ່ານີ້ໄດ້ສະແດງຜົນງານອັນຫນ້າຈັບໃຈຫລາຍ ແລະໄດ້ໃຫ້ຄຳເປີກສາທາງເທັກໂນໂລຢີ ທີ່ມີປະ ໂຫຍດຢ່າງຫລວງຫລາຍ, ແຕ່ມັນກໍເປັນນະໂຍບາຍພື້ນຖານຂອງກະຊວງຕ່າງໆ ເຊິ່ງໃຫ້ຄົນເຫລົ່ານັ້ນ ເຮັດວຽກຢູ່ນຳ, ຕໍ່ມາສິ່ງນັ້ນ ໄດ້ກາຍເປັນສິ່ງຕັດສິນອະນາຄົດຂອງປະເທດ. ນີ້ເປັນຄວາມຈິງເດັ່ນແຈ້ງ ພິເສດ ສຳລັບກໍລະນີ ກະຊວງພາຍໃນ (ມະຫາດໄທ) ພາຍໃຕ້ສົມເດັດກົມພະຍາດຳຣົງ ຣາຊານຸພາບ ເຊິ່ງ ໄດ້ຂະຫຍາຍວຽກງານບໍລິຫານໃຫ້ທັນສະໄຫມຂຶ້ນເລື້ອຍໆ ໄປຮອດແຂວງຕ່າງໆພາຍໃນພະລາຊະອານາ ຈັກ ກົມພະຍາດຳຣົງ ຊົງຂະຫຍາຍລະບົບ "ມົນທົນ" ແລະຂ້າຫລວງໃຫຍ່ອອກໄປ ຫລັງຈາກໄດ້ຍົກແຂວງ ທັງຫມົດ ໃຫ້ຂຶ້ນກັບກະຊວງຂອງພະອົງ ໃນປີ 1894 ໂດຍສ້າງລະບົບການບໍລິຫານງານໃນແຂວງ, ໂດຍ ນຳໃຊ້ຂ້າລາຊະການ ທີ່ໄດ້ຮັບການຝຶກຝົນແບບສະໄຫມໃຫມ່ທີ່ມີຈຳນວນຈຳກັດນັ້ນ ໃຫ້ເກີດປະໂຫຍດ ຫລາຍທີ່ສຸດ ເພື່ອບໍລິຫານອົງເຂດອັນກວ້າງໃຫຍ່ ໂດຍຜ່ານ 18 ເມືອງຫລວງຂອງມົນທົນ. ອຳນາດ ແລະ ສິດທິພິເສດຂອງເຊື້ອສາຍເຈົ້າ ແລະຄອບຄົວຂ້າຫລວງໃນແຂວງ ໄດ້ຮອບແຮງລົງຢ່າງໄວວາ ເມື່ອພວກ ເຂົາຖືກປ່ຽນແທນ ໂດຍຂ້າລາຊະການທີ່ມາຈາກໃນເມືອງ ຫລື ເມື່ອການສຳປະທານປ່າໄມ້ຖືກເຫມົາຊື້ ໂດຍລັດຖະບານກາງ. ການເຮັດດັ່ງນີ້ ບໍ່ແມ່ນວ່າລຸລ່ວງໄປໂດຍດີຢ່າງບໍ່ມີການຕໍ່ຕ້ານ. ໃນປີ 1902 ມີການ ກໍ່ຂະບົດຮອດ 3 ເທື່ອ ຄືໃນພາກເຫນືອ, ພາກຕາເວັນອອກສຽງເຫນືອ ແລະໃນປັດຕານີ ທາງພາກໃຕ້. ການຜາບກະບົດທັງສາມເທື່ອດ້ວຍກອງທັບທັນສະໄຫມນັ້ນ ໄດ້ສະແດງໃຫ້ເຫັນຢ່າງຈະແຈ້ງວ່າ ລັດຖະ ບານ ມີເທັກນິກໃຫມ່ ແລະຄວາມເຂັ້ມແຂງພຽງພໍ. ສະຫຍາມລອດພົ້ນຈາກວິກິດການປີ 1893 ມາໄດ້, ແຕ່ອຳນາດຕາເວັນຕົກທັງຫລາຍ ກໍຍັງຄົງຍຶ່ມຢູ່ຕໍ່ອະທິປະໄຕແຫ່ງດິນແດນຂອງສະຫຍາມ ໂດຍກະທຳມາ ຈາກພາຍນອກ ພ້ອມທັງລ່ວງລະເມີດອະທິປະໄຕພາຍໃນ. ການອ້າງກຳມະສິດເຫນືອດິນແດນ ຍັງຕົກລົງ ກັນບໍ່ໄດ້, ເສັ້ນແບ່ງຊາຍແດນຍັງບໍ່ໄດ້ປັກປັນ ເຊິ່ງເລື່ອງນີ້ ເປັນສິ່ງກະກຽມກ່ອນທີ່ການບຸກເບີກຖະຫນົນ ຢູ່ພາຍໃນຂອງສະຫຍາມຍັງບໍ່ມີທາງເປັນໄປໄດ້. ສົນທິສັນຍາຫລາຍສະບັບໃນຊຸມປີ 1850 ໄດ້ຈຳກັດອຳ ນາດການເກັບພາສີພື້ນຖານຂອງສະຫຍາມຫລາຍຢ່າງ, ແລະລະບົບທີ່ກົດຂີ່ກ່ຽວກັບສິດທິນອກອານາເຂດ ເຊິ່ງນຳໃຊ້ບໍ່ສະເພາະກັບຄົນຢູຣົບ ແຕ່ໃຊ້ກັບຄົນຊາດອື່ນ ທີ່ຂຶ້ນທະບຽນກັບອັງກິດ ແລະຝຣັ່ງ ເຊັ່ນ ຄົນຈີນ ຄົນລາວ ກຳພູເຈຽ ຊານ (ຊຽງຕຸງ) ແລະ ພະມ້າ ນຳ ໂດຍບໍ່ຕ້ອງຂຶ້ນສານສະຫຍາມ ເວລາມີຄະດີ. ຄວາມຫຍຸ້ງຍາກ ກັບ ຝຣັ່ງ ໄດ້ຮັບການແກ້ໄຂດ້ວຍການຕົກລົງສົນທິສັນຍາຫລາຍສະບັບຊ້ຳແລ້ວຊ້ຳອີກ ຈົນມາເຖິງປີ 1907 ສົນທິສັນຍາດັ່ງກ່າວ ໄດ້ມອບຊາຍແດນດ້ານຕາເວັນອອກປັດຈຸບັນໃຫ້ແກ່ສະຫຍາມ ໂດຍການຍົກດິນແດນໃນລາວ ແລະ ກຳປູເຈຍ ໃຫ້ຝຣັ່ງ ເພື່ອແລກກັບການຍຸຕິການອ້າງສິດເຫນືອດິນແດນ ແລະການໃຊ້ສິດນອກອານາເຂດໃນລາຊະອານາຈັກສະຫຍາມ. ຄ່າຮຽກຮ້ອງຂອງອັງກິດ ສຳລັບການຍິນ ຍອມໃນທຳນອງດຽວກັນ ກໍແຜ່ງເທົ່າໆກັນ; ໃນທີ່ສຸດ ຄ່າຮຽກຮ້ອງກໍຖືກຊຳລະໄປ ໃນປີ 1909 ເມື່ອ ສະຫຍາມຍອມຍົກຫົວເມືອງຂຶ້ນມາລາຢູ 4 ລັດ ໃນພາກໃຕ້ຄື ເກດາຫ໌, ເປີລິດສ໌, ກະລັນຕັນ ແລະ ຕຣັງ ການູ ໃຫ້ອັງກິດ. ກົດເກນພື້ນຖານຂອງສະພາບນອກອານາເຂດ ແລະຂໍ້ຈຳກັດໃນສົນທິສັນຍາ ກ່ຽວກັບ ການເກັບພາສີ ຍັງຄົງມີຜົນບັງຄັບໃຊ້ຕໍ່ໄປລະຍະນຶ່ງ. ແຕ່ສັນຍາຕ່າງໆຫລັງປີ 1900 ກໍເຮັດໃຫ້ຄວາມກົດ ດັນ ອະທິປະໄຕດິນແດນສະຫຍາມຫລຸດລົງ ແລະຍິ່ງກວ່າສິ່ງໃດຫມົດ ມັນໄດ້ເຮັດໃຫ້ຊາຍແດນທີ່ຕົກລົງກັນ

ເປັນທີ່ຮັບຮູ້ໂດຍນາໆປະເທດ. ເມື່ອຂໍ້ຕົກລົງແບບມິດຕະພາບ ລະຫວ່າງ ອັງກິດ ກັບຝຣັ່ງ ບັນລຸໄດ້ ກໍເຮັດໃຫ້ເຄວາມເປັນປໍລະປັກຂອງທັງສອງຍຸຕິລົງໄດ້ໃນປີ 1904 ແລະເມື່ອສົງຄາມໂລກຄັ້ງທີນຶ່ງ ກໍ່ຄວັບຂົ້ນ ສະຫຍາມກໍຫມົດຄວາມຢຳເກງ ລັດທິຈັກກະພັດນິຍົມຕາເວັນອອກໃນທັນທີ.

ຊາວຫ້າປີ ລຸນຫລັງ 1885 ການປ່ຽນແປງຮູບແບບໂຄງສ້າງ ພາຍໃນຂອງ ອານາຈັກ ໄດ້ເລີ່ມ ຂົ້ນຢ່າງແທ້ຈິງ ດ້ວຍການສະຖາປະນາຊາດທີ່ສານສອດເຂົ້າກັນ ໂດຍການຄວບຄຸມການບໍລິຫານ ແລະ ການສ້າງສະຖາບັນທົ່ວປະເທດ ພາຍໃນຂອບເຂດຊາຍແດນທີ່ກຳນົດໄວ້. ລະບົບໂຮງຮຽນລັດ ແບບສະ ໄຫມໃຫມ ໄດ້ແຜ່ກະຈາຍອອກທົ່ວປະເທດລະຫວ່າງປີ 1889 ແລະ 1910 ເມື່ອຈຳນວນ ນັກຮຽນຫລາຍຂົ້ນ ຈາກ 5,000 ຄົນ ເປັນ 84,000 ຄົນ. ການຮ່າງປະມວນກົດຫມາຍສະໄຫມໃຫມ, ການສ້າງຕັ້ງລະບົບ ການເກນທະຫານ ແລະການບໍລິຫານການຄັງກັບພາສີແບບທັນສະໄຫມ ແລະການຍຸຕິການໃຊ້ ແຮງງານ ເກນ ທັງຫມົດນີ້ໄດ້ເຮັດສຳເລັດລົງພາຍໃນເວລາຈຳກັດ, ທ້າຍທີ່ສຸດ ອຸປະສັກທີ່ຂວາງຂັ້ນການ ປະຕິຮູບ ແລະການພັດທະນາປະເທດໃຫ້ທັນສະໄຫມ ບໍ່ແມ່ນການຕໍ່ຕ້ານຂອງພວກຫົວອະນຸລັກເດີມ ທີ່ມຸດມອດໄປ ໃນທົດ ສະວັດຕໍ່ມາ ລຸນຫລັງປີ 1885 ເມື່ອຄວາມຮຽກຮ້ອງໃຫ້ມີການປ່ຽນແປງປາກົດຈະແຈ້ງຂົ້ນ, ແຕ່ແມ່ນ ຍ້ອນຈຳນວນຂັ້ນນຳຜູ້ມີການສຶກສາດີ ຜໍຈະມາດຳເນີນວຽກງານໃຫ້ລຸລ່ວງໄປໄດ້ນັ້ນ ມີຢູ່ຢ່າງຈຳກັດ ຫລາຍ. ຕໍ່ເມື່ອຂັ້ນນຳທີ່ເປັນຄົນຫນຸ່ມຜູ້ໄດ້ຮັບການສຶກສາອົບຮົມມາແຕ່ຕ່າງປະເທດເປັນສ່ວນຫລາຍ ເກີດ ເດັ່ນດັງຂົ້ນມາ ເມື່ອຫມົດສະໄຫມລັດຊະການເຈົ້າຊີວິດຈຸລາລົງກອນ (ຣາຊະການທີ 5), ຄວາມສຳເລັດ ຂອງແຜນການປະຕິຮູບ ຈຶ່ງໄດ້ຮັບການຮັບປະກັນ ເຖິງວ່າມັນຍັງບໍ່ສົມບູນແບບເທື່ອກໍຕາມ.

## ອິນດູຈີນຝຣັ່ງ

ໃນບັນດາການປັ້ນແຕ່ງດ້ານການເມືອງທັງຫມົດທີ່ຍຸກແຫ່ງຈັກກະພັດນິຍົມ ນຳມາສູ່ອາຊີຕາເວັນ ອອກສຽງໃຕ້ນັ້ນ ບໍ່ມີອັນໃດຈະເປັນການປັ້ນແຕ່ງຢ່າງມີສີລະປະງາມເກີນຫນ້າ ອິນດູຈີນຝຣັ່ງ. ແນວຄຶດ ຫລັກທີ່ວ່າ: ອິນດູຈີນໃຫຍ່ ບໍ່ເຄີຍແຕກຫນ່ຳຈ່ຳຈາວ ຢູ່ໃນຫມູ່ຝົນລະເມືອງອານານິຄົມ ທີ່ສັງຄົມລ້ອນແປກ ຕ່າງຫລາກຫລາຍແຫ່ງນີ້ ເຖິງແມ່ນວ່າແນວຄຶດຫລັກອັນນີ້ ຈະເປັນປະໂຫຍດ ສຳລັບພວກຊາດນິຍົມ ຫວຽດນາມ ເພາະເຄີຍມີປະເພນີນິຍົມຢາກເດັ່ນເໜືອກຳພູເຈຽແລະລາວ ມາແຕ່ໃດກໍຕາມ. ການປົກຄອງ ຂອງຝຣັ່ງ ມີຄວາມຫມາຍຫລາຍຢ່າງ ແລະ ກໍ່ໃຫ້ເກີດການຕອບໂຕ້ຕ່າງໆກັນໄປ ຈາກປະຊາຊົນ ຫວຽດ ນາມ ກຳປູເຈຍ ແລະລາວ ຜູ້ເຊິ່ງຖືກອຳນາດຂອງຄວາມໂລບມາກ ຄອບງຳຢູ່ ພຽງບຶດນຶ່ງຄາວດຽວ. ໂຄງສ້າງຂອງອິນດູຈີນຝຣັ່ງ ເລິກລັບຊັບຊ້ອນສົມຄວນ. ໃນບັນດາເຂດປົກຄອງ ທັງຫ້າທີ່ແຍກກັນ ຄື ຫວຽດນາມໃຕ້ (ໂກແຊງຊີນ) ຢູ່ພາຍໃຕ້ອຳນາດສູງສຸດ ຂອງກະຊວງອານານິຄົມ ແລະກະຊວງນາວິກະ ໂຍທິນ ທີ່ນະຄອນປາຣີ, ມັນເປັນອານານິຄົມດຽວ ຕາມຄວາມຫມາຍແຄບໆ ຂອງ ລັດຖະທຳມະນູນ, ຫວຽດນາມ ພາກກາງ(ອານາມ), ຫວຽດນາມພາກເໜືອ (ຕັງເກ), ກຳພູເຈຍ ແລະ ລາວ ໄດ້ຊື່ວ່າ ເປັນ ປະເທດໃນອາຣັກຂາພິເສດ ຢູ່ພາຍໃຕ້ອຳນາດສູງສຸດຂອງກະຊວງການຕ່າງປະເທດ ຝຣັ່ງ. ຢ່າງໃດກໍຕາມ ພາຍຫລັງປີ 1887 ເຂດການປົກຄອງທັງຫ້າ ກໍຖືກນຳມາຢູ່ພາຍໃຕ້ ການປົກຄອງ ຂອງຂ້າຫລວງໃຫຍ່ ຜູ້ດຽວ ໂດຍມີສຳນັກງານໃຫຍ່ຢູ່ກຸງ ຣາໂນຍ. ຫົວຫນ້າເຂດປົກຄອງທັງຫ້າ ປະຕິບັດຫນ້າທີ່ ພາຍໃຕ້ ອຳນາດຂອງຂ້າຫລວງໃຫຍ່ ມີຄື ຂ້າຫລວງປະຈຳໂກແຊງຊີນ ແລະພວກຜູ້ຕາງຫນ້າ (Résidents Supérieurs) ປະຈຳອານາມ, ຕົງເກງ, ກຳປູເຈຍ ແລະ ລາວ. ມີງົບປະມານລວມ ສຳລັບໂກ ແຊງຊີນ ທັງຫມົດ ແລະງົບປະມານສຳລັບທ້ອງຖິ່ນຫ້າເຂດນັ້ນ. ຕາມລັດຖະດຳລັດປີ 1899 ລາຍໄດ້ຈາກການ ເກັບພາສີທາງອ້ອມ (ເຊັ່ນ ພາສີນຳເຂົ້າ, ພາສີຝິ່ນ, ເຫລົ້າ, ເກືອ ແລະອື່ນໆ) ຖືກຮັກສາໄວ້ ໃຫ້ລັດຖະບານ

ໃນຂະນະທີ່ລາຍຮັບຈາກການເກັບພາສີໂດຍກົງ (ພາສີທີ່ດິນແລະຄ່າທຳນຽມ) ຖືກນຳໃຊ້ ສຳລັບວຽກງານບໍລິຫານເຂດ ແລະທ້ອງຖິ່ນ.

ໂປນ ດູແມຣ໌ ຂ້າຫລວງໃຫຍ່ ລະຫວ່າງປີ 1897-1902 ເປັນສະຖາປະນິກຜູ່ດີເດັ່ນ ຂອງສະຖາບັນອານານິຄົມ ສຳລັບອິນດູຈີນ. ເພີ່ນຮວມສູນອຳນາດ ແລະເປັນປະທານວຽກງານຜະແໜນກ ພິເສດ ຂອງອານານິຄົມ ເຊັ່ນ ພາສີອາກອນ, ການໄປສະນີໂທລະເລກ, ການປ່າໄມ້ ແລະການຄ້າ ແລະທັງເປັນຜູ້ນຳເອົາງົບປະມານແບບສາມັນ ເຂົ້າມາໃຊ້. ໃນຍຸກຂອງ ໂປນ ດູແມຣ໌ ໄດ້ມີການສ້າງຕັ້ງຜະແນກພູມສາດອິນດູຈີນຂຶ້ນ ໂຮມທັງສຳນັກຝຣັ່ງ ແຫ່ງບູລະພາທິດທີ່ໂດ່ງດັງ ຢູ່ກຸງຮາໂນຍ ເຊິ່ງເປັນແຫລ່ງເຕົ້າໂຮມ ທັງສະຖາບັນພາສາວິທະຍາສາດ ແລະຜະແໜນກບໍລິຫານເຂົ້ານຳກັນ ໂດຍມີຈຸດມຸ່ງໝາຍ ທີ່ຈະອະນຸຮັກ ອະນຸສອນສະຖານປະຫວັດສາດ. ຂ້າຫລວງໃຫຍ່ ໄດ້ຮັບຄຳແນະນຳ ແຕ່ບໍ່ໄດ້ຖືກກວດກາຈາກລັດຖະສະພາ (ຊຶ່ງມີຊື່ວ່າ ສະພາສູງ ແຫ່ງອິນດູຈີນ ແຕ່ປີ 1887 ເຖິງ 1911 ແລະມີຊື່ໃຫມ່ວ່າ ລັດຖະສະພາ ຫລັງປີ 1911) ເຊິ່ງພິຈາລະນາງົບປະມານທົ່ວໄປ ແລະການປະເມີນພາສີແບບລັບໆ ຂອງສະພານີ້ ປະກອບດ້ວຍ ເຈົ້າໜ້າທີ່ຝຣັ່ງຂັ້ນສູງຊາວຄົນ ແລະ "ເຈົ້າໜ້າທີ່ຂັ້ນສູງທີ່ເປັນຄົນທ້ອງຖິ່ນ ອີກຫ້າຄົນ, ສະມາຊິກຄົນ ຫວຽດນາມ, ກຳພູເຈຍແລະລາວ ທີ່ຄັດເລືອກເອົາທຸກປີ ໂດຍຂ້າຫລວງໃຫຍ່ເອງ. ຄືກັນກັບ ອົວດູເມີຣ໌ ອັນ ມະຫຶມາ ຢູ່ກຸງຮາໂນຍ, ການໂຮມສູນອຳນາດແບບນີ້ ເຮັດໃຫ້ການຄົມມະນາຄົມ, ການບໍລິຫານ ແລະ ວຽກງານອື່ນໆດີຂຶ້ນຫລາຍ, ແຕ່ມັນບໍ່ສາມາດບັງຄັບໃຫ້ມີຫຍັງໄດ້ ນອກຈາກຄວາມສາມັກຄີແບບສົມມຸດ ຢູ່ໃນສາມສັງຄົມທີ່ແຕກຕ່າງກັນຢ່າງຂາດຂັ້ນ ໃນນັ້ນມີ ຫວຽດນາມ ເຊິ່ງບໍ່ດົນກໍເປັນບ່ອນຈໍ່ເຊື້ອການປະຕິວັດ.

## ຫວຽດນາມ

ຂັ້ນຕອນແຮກຂອງການສູນເສຍອະທິປະໄຕຂອງຫວຽດນາມໃຫ້ຝຣັ່ງ ເກີດຂຶ້ນໃນປີ 1858-1867 ເມື່ອຝຣັ່ງ ກືນເອົາຫວຽດນາມໃຕ້ໄດ້ ແລະປ່ຽນຊື່ເປັນອານານິຄົມໂກແຊງຊີນ. ຂັ້ນຕອນທີສອງ ເກີດຂຶ້ນ ລະຫວ່າງ ປີ 1873-1885 ເມື່ອຝຣັ່ງສ້າງຕັ້ງກອງທັບອັນຍິ່ງໃຫຍ່ຂຶ້ນໃນພາກເໜືອ ແລະເຮັດຜິດພາດ ກໍ່ສົງຄາມກັບຈີນ ອັນເຮັດໃຫ້ຫວຽດນາມເໜືອ ແລະກາງ ຕົກເປັນປະເທດໃນອາຣັກຂາໃນປີ 1873 ນາຍ ພົນ ດູເປຣ (Admiral Dupré) ຜູ້ສຳເລັດລາຊະການ ໂກແຊງຊີນ ສົ່ງກອງທະຫານອອກໄປຫວຽດນາມ ເໜືອ ນຳພາໂດຍ ຟຣັງຊິດສ໌ ກາກນິເຢ (Françis Garnier) ທັງສອງກໍລະນີ ແມ່ນເພື່ອຍຶດຕີເອົາ ຫວຽດນາມ ເໜືອ ໃຫ້ມາຢູ່ພາຍໃນຂອບເຂດແຫ່ງການຄ້າແບບອານານິຄົມຂອງຝຣັ່ງຢູ່ໄຊ່ງອນ ແລະ ເພື່ອໃຫ້ບັນລຸເຖິງຄວາມຍິ່ງໃຫຍ່ເໜືອກະໂຕລາຊະສຳນັກຫວຽດນາມ ແບບທີ່ບໍ່ເຄີຍມີອິດທິພົນທຽມຄູ່ໃດໆ ບໍ່ວ່າ ອັງກິດ ຫລື ເຢຽລະມັນ ສາມາດສະຖາປະນາຂຶ້ນໄດ້ໃນທີ່ນີ້. ໂດຍສະຖາປະນາຕົນເອງຂຶ້ນເປັນ "ທ່ານ ກາກນິເຢ ຂຸນນາງ ຜູ້ຍິ່ງໃຫຍ່" ເຂົ້າຍຶດປ້ອມທະຫານຮາໂນຍ ໄວ້ໄດ້ໃນລະຍະສັ້ນໆ ແຕ່ຖືກຂ້າຕາຍ ຂະນະທີ່ຂອງກອງທະຫານ ຫວຽດນາມ ແລະພວກກອງໂຈນ "ທໍ້ທຸງດຳ" ເຂົ້າບຸກໂຈມຕີ (ພວກທະຫານ ຈີນເກົ່າຂອງຂະບົດໄຕ້ເຜງ ເຊິ່ງຄືກັນກັບພວກໂຈນທໍ້ໃນລາວ, ໄດ້ຂ້າມຊາຍແດນຫວຽດນາມ ແລະຈັດຕັ້ງ ກັນຂຶ້ນເປັນກອງໂຈນ), ອີກເກົ້າປີຕໍ່ມາ ກອງທະຫານຝຣັ່ງ ອີກກອງນຶ່ງ ນຳໂດຍ ຮັງຣີ ຣິວິແອຣ໌ (Henri Rivière) ໄດ້ມາເຖິງພາກເໜືອ. ລາຊະສຳນັກແຫ່ງເຫ້ ສວຍໃຊ້ຖານະຂອງຕົນ ໃນນາມເປັນປະເທດ ສະລາດ ຮ້ອງຂໍໃຫ້ຈີນເຂົ້າມາຂັດຂວາງ ເພື່ອຮັກສາຫວຽດນາມເໜືອ ຈາກການເຂົ້າຄອບຄອງ ຂອງ ຝຣັ່ງ. ຮັງຣີ ຣິວິແອຣ໌ ຖືກຂ້າຕາຍ, ຝຣັ່ງປະຕິເສດຂໍ້ຮຽກຮ້ອງຂອງປັກກິ່ງ ທີ່ໃຫ້ຝຣັ່ງຖອນອອກຈາກ ຫວຽດນາມເໜືອ ແລະແລ້ວ ສົງຄາມລະຫວ່າງຈີນກັບຝຣັ່ງ ກໍລະເບີດຂຶ້ນໃນລະຍະຕໍ່ມາ (ກໍລະກົດ 1884 - ເມສາ 1885) ມັນສ້ຽງສຸດລົງ ດ້ວຍການປະລາໄຊຂອງຝ່າຍຈີນ ແລະຄວາມສູນເສຍເອກະລາດ

ທັງຫມົດຂອງຫວຽດນາມ. ຈົນເທົ້າເຖິງທຸກວັນນີ້ ບັ້ນຕອນອັນຫນ້າອັບອາຍ ໃນຍຸກຈັກກະພັດນິຍົມບັ້ນນີ້ ບໍ່ເຄີຍຖືກລືມໄລໄປຈາກຄວາມຊົງຈຳຈັກເທື່ອ ບ່ວ່າຢູ່ ຣາໂນຍ ຫລື ປັກກິ່ງ. ອາດຕີລາຄາເລື່ອງການປົກຄອງຫວຽດນາມ ແບບອານານິຄົມຂອງຝຣັ່ງ ໄດ້ອີກ ແບບນຶ່ງຄື ສັງຄົມຫວຽດນາມໃນ ປີ1885 ນັ້ນ ເປັນສັງຄົມທີ່ກະແຈກກະຈາຍ ມີຄວາມແຕກຕ່າງກັນໃນດ້ານຮີດຄອງປະເພນີ ຄວາມນຶກຄຶດ ແລະແບບແຜນການດຳລົງຊີວິດ ຫລາຍກວ່າທີ່ເປັນຢູ່ໃນສັງຄົມຂອງທັງສາມເຂດນີ້ ເມື່ອປີ 1954 ຊ້ຳອີກ. ການແບ່ງຫວຽດນາມອອກເປັນເຂດປົກຄອງ ທີ່ຕັດແຍກອອກຈາກກັນຢ່າງ ເປັນທາງການ ແບບບໍ່ເຄີຍມີມາກ່ອນ ຄື ໂກແຊງຊີນ ຕົງແກງ (ຕັງເກ໋ຽ) ແລະອານາມ (ເຂດສຸດທ້າຍ ຫມາຍເຖິງພາກໃຕ້ແດນສະຫງົບ ເປັນຄຳສັບທີ່ນັກໂຫ່ອານານິຄົມຝຣັ່ງ ສະໄຫມລາຊະວົງຖັ໋ງ ໃຊ້ເອີ້ນຫວຽດນາມ ແລະຝຣັ່ງໄດ້ນຳມາໃຊ້ ໃຫມ່). ໃນລະຍະຍາວ ຜົນກະທົບທາງວັດທະນະທຳຂອງຝຣັ່ງ ຕ້ອງໄດ້ເຂັ້ມແຂງຂຶ້ນ ກວ່າໃນທາງພາກໃຕ້ຊຶ່ງຝຣັ່ງປົກຄອງໂດຍກົງ. ມັນອ່ອນແຮງລົງຫລາຍກວ່າໃນພາກກາງ, ຍ້ອນສອງສາເຫດ ຄືການຄົງຕົວຢູ່ຂອງລາຊະສຳນັກແບບດັ້ງເດີມ ທີ່ເມືອງເຫ ແລະການຂາດແຄນຜູ້ຮັບເຫມົາ ຄົນຝຣັ່ງ ກັບການລົງທຶນໃນຫວຽດນາມພາກກາງ. ແຕ່ການແຍກການປົກຄອງເປັນເຂດ ກໍເປັນການປະຕິບັດ ໃນລະດັບອະນຸພາກພື້ນນຳ. ຫວຽດນາມສະໄຫມກ່ອນອານານິຄົມ ຈັດແບ່ງອອກເປັນ 31 ແຂວງ, ເມື່ອມາຢູ່ ພາຍໃຕ້ການປົກຄອງຝຣັ່ງ ຈຳນວນແຂວງຕື່ມຂຶ້ນ 2 ເທົ່າ ຄື 60 ແຂວງ, ພາກໃຕ້ 21, ພາກກາງ 16 ແລະພາກເຫນືອ 23, ການຈັດແບ່ງນີ້ ກົງກັນຂ້າມຢ່າງຂາດຂັ້ນກັບສິ່ງທີ່ ນັກປະຕິຮູບຫວຽດນາມ ເຊັ່ນ ຫງຽນ ຕຣວ໋ງ ໂຖ (Nguyen Trong To) ສະເຫນີໄວ້ໃນຊຸມປີ 1860 ຄື ຫລຸດຈຳນວນລັດຖະບານຂັ້ນແຂວງລົງ ເພື່ອໃຫ້ມີປະສິດທິຜົນ ແລະເງິນເດືອນດີກວ່າເກົ່າ. ການສ້າງຕັ້ງຜະແຫນກພິເສດ ວ່າດ້ວຍດິນແດນ ນອກອານາເຂດຂອງຝຣັ່ງ ໃນປີ 1888 ໃນສາມຕົວເມືອງ ຄື ຣາໂນຍ ຮາຍຟອງ ແລະ ດານັ໋ງ ເຊິ່ງຝຣັ່ງ ເລືອກປົກຄອງໂດຍກົງ ກໍເປັນອີກຕົວຢ່າງນຶ່ງ ຂອງການທະວີອຸປະສັກຕໍ່ການປົກຄອງທ້ອງຖິ່ນຫລາຍຂຶ້ນ.

ນະໂຍບາຍອານານິຄົມຂອງຝຣັ່ງໃນວຽດນາມ ເຄື່ອນເຫນັ໋ງຢູ່ລະຫວ່າງສອງໂຕ່ງສຸດ ແຫ່ງ "ການຄ່ອຍກືນກິນ" ອັນຫມາຍເຖິງການເຮັດໃຫ້ສະຖາບັນທາງວັດທະນະທັມແລະການປົກຄອງ ກາຍເປັນແບບກາລິກ (ປະເທດບັນພະບຸລຸດຝຣັ່ງ ໃນຍຸກບູຮານເອີ້ນວ່າ Galle, Gallizisation) ແລະ "ການປະສົມປະສານ" ກັນ ອັນມີຜົນໃຫ້ຍັງຄົງຮັກສາໄວ້ ເຊິ່ງສະຖາບັນແບບເກົ່າຢ່າງຖືກຕ້ອງຕາມກົດຫມາຍ ຕາມການປົກຄອງຂອງຝຣັ່ງ. ປະຫວັດສາດການປົກຄອງຂອງຝຣັ່ງຢູ່ໄຊ່ງ່ອນ ໃນຕົ້ນຊຸມປີ 1860 ສະແດງເຖິງຄວາມຫຍຸ້ງຍາກ ຂອງລະຍະປະຕິບັດການທຸກຂັ້ນ. ຂັ້ນທຳອິດ ບັນດາຂຸນນາງລະດັບສູງສຸດຂອງ ຫວຽດນາມທັງຫມົດ ຖືກປົດອອກຈາກອຳນາດ ແລະຖືກປ່ຽນແທນໂດຍເຈົ້າຫນ້າທີ່ຝຣັ່ງ. ບໍ່ມີຄົນຫວຽດນາມຢູ່ໃນຕຳແຫນ່ງບໍລິຫານສູງກວ່າຂັ້ນຕາແສງ "ແຕ່ເນື່ອງຈາກຝຣັ່ງ ບໍ່ມີພະນັກງານທີ່ເປັນຄົນຕົນເອງພຽງພໍ ເພື່ອໃຫ້ດຳເນີນວຽກການໄດ້, ນະໂຍບາຍດັ່ງກ່າວ ຈຶ່ງຢູ່ມາໄດ້ຮອດແຕ່ທ້າຍປີ 1862 ເທົ່ານັ້ນ ແລ້ວບັນດາຂຸນນາງຫວຽດນາມ ກໍໄດ້ກັບເຂົ້າມາດຳລົງຕຳແຫນ່ງເກົ່າ. ຍ້ອນວ່າພະນັກງານຂັ້ນແຂວງ ຊາວຫວຽດນາມຫລາຍຄົນຕໍ່ຕ້ານຝຣັ່ງ ນະໂຍບາຍດັ່ງກ່າວກໍເລີຍຖືກໂຍນຖິ້ມໄປ. ໃນຂັ້ນທີສາມ ເປັນຮູບແບບທີ່ມີລັກສະນະປະນີປະນອມກວ່າ ຄື ຜູ້ແທນຂອງລະບົບອານານິຄົມໃຫມ່ຂອງໄຊ່ງ່ອນ ລະດັບສຳຄັນສຸດ ແມ່ນພວກຄ້າລາຊະການທີ່ມີຊື່ວ່າ ຜູ້ກວດກາກິດຈະການພາຍໃນ. ຜູ້ກວດກາລະດັບນີ້ (ມີຢູ່ປະມານ 30 ຄົນ ໃນປີ 1868, ນຶ່ງຄົນຕໍ່ປະຊາກອນຫວຽດນາມພາກໃຕ້ 70,000 ຄົນ) ເປັນພະນັກງານ, ເປັນຫມໍປາດ ຫລື ວິສະວະກອນໃນກອງທັບເຮືອຝຣັ່ງ. ແຕ່ເພື່ອໃຫ້ໄດ້ຮັບການສົ່ງເສີມ ພວກເຂົາຕ້ອງໄດ້ຜ່ານ ການທົດສອບ ທີ່ສະແດງອອກເຖິງຄວາມຮູ້ອັນຫນັກແຫນ້ນໃນດ້ານພາສາຫວຽດນາມ, ກົດຫມາຍ ຫວຽດນາມ, ຕົວຫນັງສືຈີນ ແລະແມ່ນແຕ່ຕົວຫນັງສື ກຳປູເຈຍ ແລະໄທ.

ໃນຫວຽດນາມພາກກາງແລະພາກເຫນືອ ລັດຖະບານອານານິຄົມ ໄດ້ຂະຫຍາຍອຳນາດອອກໄປຫລັງປີ 1885 ແຕ່ກໍເຮັດບໍ່ໄດ້ຫລາຍ ດ້ວຍການສ້າງຕັ້ງລະບົບບໍລິຫານໃຫມ່ ຄືກັນກັບຄ່ອຍໆຍຶດເອົາອຳນາດຕາມປະເພນີ ຈາກຫວຽດນາມເທື່ອລະຫນ້ອຍ. ພື້ນຖານທາງກົດຫມາຍຂອງການປົກຄອງຝຣັ່ງ

ຄື ສົນທິສັນຍາ ທີ່ເຮັດຂຶ້ນລະຫວ່າງຝຣັ່ງກັບລາຊະສຳນັກຫວຽດນາມໃນປີ 1874, 1883 ແລະ1884 ໄດ້ປ່ອຍໃຫ້ພະເຈົ້າຈັກກະພັດຫວຽດນາມຢູ່ທີ່ເມືອງເຫວ້ ເປັນກ້ອນຂີ້ຝຸ່ນແຫ່ງອຳນາດນ້ອຍໆກ້ອນນຶ່ງ ທີ່ບໍ່ສາມາດເຮັດຫຍັງຜິດໄດ້. ໃນສະໄໝ ດູແມຣ໌ 1897-1898, ຂ້າຫລວງໃຫຍ່ໄດ້ຍຶດອຳນາດນັ້ນໄວ້. ໃນປີ 1897 ເອົາບັງຄັບໃຫ້ພະເຈົ້າຈັກກະພັດ ຖັນ-ໄຕ (Thanh-ai) ອອກພະລາຊະໂອງການ ໂອນອຳນາດທັງຫມົດຂອງອຸປະຣາດສູງສຸດ ແຫ່ງລາຊະສຳນັກພາກໃຕ້ ໃຫ້ແກ່ພະນັກງານຝຣັ່ງ. ເພື່ອໃຫ້ການຄວບຄຸມຂອງຝຣັ່ງໃນຫວຽດນາມພາກກາງເຄັ່ງຄັດຂຶ້ນ ດູແມຣ໌ ບັງຄັບໃຫ້ຈັກກະພັດຖັນໄຕ ອະນຸຍາດໃຫ້ຜູ້ປະຈຳການສູງສຸດ (resident superieur) ຝຣັ່ງ ປະຈຳຢູ່ເມືອງເຫວ້ ເປັນປະທານກອງປະຊຸມອົງຄະມົນຕີ ແຫ່ງລາຊະສຳນັກຫວຽດນາມ. ອັນນີ້ຫມາຍຄວາມວ່າ ບັດນີ້ ລັກຖະມົນຕີຂອງລາຊະສຳນັກ ໄດ້ກາຍເປັນລັດຖະມົນຕີຂອງຜູ້ປະຈຳການສູງສຸດຢູ່ທີ່ນັ້ນ ບໍ່ແມ່ນຂອງພະເຈົ້າຈັກກະພັດອີກຕໍ່ໄປ. ນອກຈາກນີ້ ຜູ້ປະຈຳການສູງສຸດປະຈຳຢູ່ຫວຽດນາມພາກກາງ ຍັງໄດ້ຮັບສິດໃນການອະນຸມັດ ພະຣາຊະໂອງການ ທັງຫມົດຂອງພະເຈົ້າຈັກກະພັດ ກ່ອນທີ່ພະອົງຈະຊົງຕັດສິນໃຈ ຈ້ຳການແດງໃຫ້ອີກ. ເຖິງແມ່ນວ່າ ຄະນະກຳມະການ 6 ຊຸດ ຂອງລະບົບລາຊະການແບບດັ້ງເດີມ ຍັງຄົງມີຕົວຕົນຢູ່ໃນເມືອງເຫວ້ ກໍຕາມ ກໍຍັງຕ້ອງມີພະນັກງານຝຣັ່ງຄົນນຶ່ງ ປະຈຳການຢູ່ກັບຄະນະກຳມະການແຕ່ລະຄະນະ. ເຂົາຕ້ອງເປັນຜູ້ມີຄວາມເຫັນນຳໃນທຸກໆເລື່ອງໃຫ້ແກ່ຄະນະກຳມະການແຕ່ລະຊຸດ ກ່ອນທີ່ການຕົກລົງໃດໆຈະຖືກສົ່ງໄປຫາທ່ານຜູ້ປະຈຳການສູງສຸດ ເພື່ອການອະນຸມັດຄັ້ງສຸດທ້າຍ. ທ້າຍທີ່ສຸດ ຝຣັ່ງກໍຍຶດອຳນາດບໍລິຫານເລື່ອງການເງິນ ຂອງຫວຽດນາມພາກກາງໄດ້ ໂດຍປະຕິເສດລາຍຮັບເອກະລາດຂອງ ລາຊະສຳນັກຫວຽດນາມ ຕາມສົນທິສັນຍາ ປີ1884 ນັ້ນເສຽ. ຮູບແບບຂອງການເສີມສ້າງອຳນາດໃຫ້ເຂັ້ມແຂງຂອງຝຣັ່ງໃນຊຸມປາຍປີ 1890 ມີອິດທິພົນສູງຕໍ່ກະແສພັດທະນາການເມືອງ ແບບທັນສະໄໝໃນຫວຽດນາມ. ດ້ວຍການຍຶດເອົາອຳນາດທາງການເມືອງຂອງລາຊະສຳນັກຫວຽດນາມແບບມິດໆນັ້ນ ຝຣັ່ງໄດ້ມ້າງມຸນກຽດສັກສີ ຂອງສັນຍະລັກແຫ່ງ ຄວາມເປັນເອກະພາບຂອງຫວຽດນາມຢ່າງດຽວທີ່ຍັງເຫລືອຢູ່ ຄືລະບອບລາຊາທິປະໄຕ ໂດຍບໍ່ໄດ້ສ້າງຕັ້ງ ສະຖາບັນສຳຄັນໃດໆ ທີ່ບໍ່ຮັບອິດທິພົນຂົງຈື ຂຶ້ນມາແທນບ່ອນ. ສາມາດເວົ້າໄດ້ວ່າ ຝຣັ່ງປົກຄອງ ຫວຽດນາມພາກກາງແລະພາກເໜືອ ໂດຍການຂຸດກົ່ນມ້າງເຜ ສະຖາບັນເກົ່າແກ່ຫລາຍກວ່າ ເຊິ່ງຕໍ່ມາ ກາຍເປັນສິ່ງໄຮ້ປະໂຫຍດສຳລັບຊາວຫວຽດນາມຜູ້ຮັກຊາດຮຸ່ນຫລັງ, ຈາກນັ້ນ ຝຣັ່ງຈຶ່ງສ້າງຕັ້ງສະຖາບັນໃຫມ່ ໄວ້ໃຫ້ເປັນຕົວຢ່າງ. ລັດຖະບານທ້ອງຖິ່ນໃນຫວຽດນາມພາກກາງແລະພາກເໜືອ ພາຍ ໃຕ້ການປົກຄອງຂອງຝຣັ່ງ ມີຄວາມກ້ຳເກິ່ງກັນທາງອຳນາດ. ແຕ່ລະມື້ ລັດຖະບານທ້ອງຖິ່ນໃນ 39 ແຂວງ ຂອງອານາມ ແລະຕົງແກງ (ຕັງເກ) ດຳເນີນການດ້ວຍສອງຫນ່ວຍງານບໍລິຫານຄູ່ຂະໜານກັນ ແຕ່ຫາກແຍກຈາກກັນຄື ນຶ່ງແມ່ນຂອງຝຣັ່ງ ແລະອີກອັນນຶ່ງ ແມ່ນຂອງຫວຽດນາມ. ແຕ່ລະແຂວງ ມີເຈົ້າແຂວງຝຣັ່ງຄົນນຶ່ງ ທີ່ມີຫນ້າທີ່ປົກຄອງຄົນເອີຣົບ ແລະຊາວອາຊີຕ່າງດ້າວ ກັບຄົນຫວຽດນາມ ອີກຈຳນວນຫນ້ອຍນຶ່ງ ໃນແຂວງທີ່ກາຍເປັນພົນລະເມືອງຝຣັ່ງແລ້ວນີ້. ແຕ່ລະແຂວງ ມີຂັ້ນແບ່ງການບໍລິ ຫານແບບຫວຽດນາມຄື ເຈົ້າແຂວງໃຫຍ່, ຮອງເຈົ້າແຂວງ, ຜູ້ກວດກາການເງິນ ແລະສານ, ເຈົ້າເມືອງ ກັບພະນັກງານປົກຄອງເມືອງ ທີ່ຮັບຜິດຊອບປົກຄອງຄົນຫວຽດນາມ. ໃນຫວຽດນາມພາກກາງ ແລະພາກເໜືອ ລະບົບການສອບເສັງແບບຂົງຈື ຍັງບໍ່ຖືກປະຖິ້ມໄປຈົນເຖິງປີ 1919, ດັ່ງນັ້ນ ເມື່ອ ຕົກມາຮອດຊຸມປີ 1930, ພະນັກງານຂັ້ນແຂວງຊາວຫວຽດນາມ ເກືອບທັງຫມົດໃນສອງພາກນີ້ ຈຶ່ງມີພື້ນຖານລະບົບການສອບເສັງ ແບບບໍ່ເອົາກັບກາລະເທສະ. ນັກວິຊາການ ທີ່ຕໍ່ຕ້ານຝຣັ່ງເຊັ່ນ ຕຣັນ ຖິຊວ໋ງ (Tran Te Xuong) ຜູ້ສອບເສັງຊະນະເລີດ ໃນປີ 1894 ໄດ້ຂໍໃຫ້ສັງເກດໃຫ້ຂໍ້ວ່າ ໃນນັກສຶກສາ 10 ຄົນນັ້ນ 9 ຄົນ ຢຸດຮຽນແລ້ວ ພວກຜູ້ສາວຂາຍປຶ້ມ ໂດຍອາຊີບພາກັນເຫງົ້ານອນຫລັບຕາເຊື່ອບໆ, ແຕ່ເຖິງມີປາກົດການ ເຫລົ່ານີ້, ລະບົບສອບເສັງ ເປັນຂຸນນາງແບບເດີມຢູ່ຂັ້ນແຂວງ ຍັງໄດ້ສືບຕໍ່ປະຕິບັດກັນ ມາອີກດົນ ພາຍ ຫລັງປີ 1885.

ໃນອານານິຄົມສົມບູນແບບຄື ໂກແຊ້ງຊີນ ການບໍລິຫານແບບພື້ນເມືອງ ໂດຍພະນັກງານ ຫວຽດນາມ ຕາມກົດລະບຽບຫວຽດນາມ ບໍ່ໄດ້ມີຢູ່ແລ້ວ. ຊາວຫວຽດນາມທັງຫມົດ ຖືກປົກຄອງໂດຍພະນັກ

ງານຝຣັ່ງ ຕາມກົດໝາຍຝຣັ່ງ. ຕົວຢ່າງ ໃນພາກໃຕ້ ແມ່ນເຈົ້ານາຍຝຣັ່ງຂັ້ນແຂວງ ເປັນຜູ້ຮັບຜິດຊອບ ໃຫ້ມີການບັນທຶກທະບຽນຕາດິນ (ອອກໃບຕາດິນ) ໃນແຕ່ລະບ້ານໄວ້ຢ່າງເປັນປະຈຳ ໃນຂະນະທີ່ທາງ ພາກກາງແລະພາກເໜືອ ແມ່ນພະນັກງານປົກຄອງຂັ້ນເມືອງຊາວຫວຽດນາມເອງເປັນຜູ້ຈັດການ. ແຕ່ ກົດລະບຽບອານານິຄົມ ກໍຫາກເປັນເອກະພາບກັນ ໃນທັງສາມພາກ ຫລາຍກວ່າທີ່ປາກົດຕໍ່ສາຍຕາ. ໃນ ຫວຽດນາມເໜືອ ຜູ້ປະຈຳ ການສູງສຸດຂອງຝຣັ່ງ ເປັນຫົວໜ້າດ້ານການບໍລິຫານ ທັງສຳລັບຝ່າຍຝຣັ່ງ ແລະຝ່າຍຫວຽດນາມ, ຢູ່ພາກກາງ, ໂດຍອາໄສການຄວບຄຸມເໜືອສະພາອົງຄະມົນຕີ ແລະຄະນະກຳ ມະການຫົກຄະນະ, ຜູ້ປະຈຳການສູງສຸດຝຣັ່ງ ສາມາດຄວບຄຸມການແຕ່ງຕັ້ງທຸກຢ່າງຂອງພວກຊຸນນາງ ລົງມາຮອດພະນັກງານບໍລິຫານຂັ້ນເມືອງ. ດັ່ງນັ້ນ ແມ່ນແຕ່ໃນບ່ອນທີ່ຊາວຫວຽດນາມຍັງສືບຕໍ່ ສະແດງ ບົດບາດເທິງເວທີການເມືອງຢູ່ ພວກເຂົາກໍໄດ້ເປັນພຽງຜູ້ສະແດງບົດບາດ ໄປຕາມການກຳກັບບົດ ຂອງ ຝຣັ່ງຢູ່ນັ້ນເອງ

## ກຳປູເຈຍ

ໃນເດືອນກໍລະກົດ ປີ 1864 ໂດຍປະຕິບັດຕາມຍຸດຄອງປະເພນີບູຮານ ເຈົ້ານະໂຣດົມໄດ້ຊົງອະພິ ເສກພະອົງເອງຂຶ້ນເປັນກະສັດແຫ່ງກຳປູເຈຍ. ພະອົງໄດ້ຮັບມົງກຸດຈາກ ນາຍທະຫານເຮືອຝຣັ່ງ ທີ່ຈັດສົ່ງ ມາຈາກໄຊ່ງ່ອນ ແລະເຄື່ອງປະດັບຍົດ(ກຸກະພັນ)ຈາກລາຊະສຳນັກສະຫຍາມ ເພາະກຳປູເຈຍ ຍັງປະພຶດ ຕົນເປັນ "ນົກສອງຫົວ" ຢູ່, ຢ່າງໃດກໍຕາມ ອິດທິພົນຂອງສະຫຍາມພາຍໃນລາຊະສຳນັກຂະເໝນ ໄດ້ ຫລຸດລົງພາຍຫລັງສົນທິສັນຍາ ປີ 1867 ເຊິ່ງເຮັດໃຫ້ຝຣັ່ງ ຍອມຮັບການອ້າງສິດຂອງສະຫຍາມ ເໜືອ ແຂວງຢູ່ນອກເຂດ ກຳປູເຈຍ ຄື ພະຕະບອງ ສຽມຣຽບ. ສ່ວນສະຫຍາມຍອມຮັບວ່າ ກຳປູເຈຍ ເປັນລັດ ພາຍໃຕ້ອາຮັກຂາຂອງຝຣັ່ງ.

ຕະຫລອດລະຍະ 20 ປີຕໍ່ມາ ຄວາມພະຍາຍາມຂອງຝຣັ່ງ ຢູ່ທີ່ນັ້ນ ສ່ວນໃຫຍ່ ແມ່ນຄວາມພະ ຍາຍາມທຳລາຍທຳນຽບອັນເປັນທຳນອງ ທີ່ຈະຄວບຄຸມອຳນາດ ແລະຈັດລະບຽບການເກັບພາສີອາກອນ ຂອງ ພະເຈົ້ານະໂຣດົມ, ໂດຍຫວັງວ່າ ຈະດູດເອົາລາຍຮັບຈາກພາສີອາກອນບາງສ່ວນ ມາໃຊ້ຈ່າຍເປັນຄ່າ ບໍລິຫານສຳລັບ ຝຣັ່ງ. ພະເຈົ້ານະໂຣດົມ ຂັດຂວາງການປະຕິຮູບນັ້ນ ແລະໃນປີ1884 ເມື່ອພະອົງປະຕິເສດ ບໍ່ອະນຸຍາດໃຫ້ຝຣັ່ງ ບໍລິຫານຄ່າທຳນຽມພາສີອາກອນ ຂອງກຳປູເຈຍ, ຝຣັ່ງໄດ້ຍື່ນຄຳຂາດ 11 ຂໍ້ ໃຫ້ ພະເຈົ້ານະໂຣດົມ ໂດຍປອມແປງໃຫ້ເປັນ "ຂໍ້ຕົກລົງແບບນຶ່ງ" ຊຶ່ງໄດ້ຈຳກັດອຳນາດຂອງພະອົງ ຢ່າງ ຖາວອນ, ເອກະສານສະບັບນັ້ນ ໄດ້ລຶບ ລ້າງລະບົບຂ້ອຍຂ້າ, ອະນຸຍາດໃຫ້ທີ່ດິນເປັນຂອງຄົນຕ່າງຊາດໄດ້, ຂະຫຍາຍອຳນາດຂອງຜູ້ປະຈຳການສູງສຸດຝຣັ່ງ ແລະບົ່ງໄວ້ວ່າ ພະເຈົ້ານະໂຣດົມ ຕ້ອງໄດ້ເຫັນດີນຳການ "ປະຕິຮູບທາງດ້ານການບໍລິຫານ. ດ້ານຕຸລາການ, ດ້ານການຄັງ ແລະດ້ານການຄ້າ" ຕາມແຕ່ ສາທາ ລະນະລັດຝຣັ່ງ ຈະພິຈາລະນາເຫັນວ່າ ມີປະໂຫຍດໃນອະນາຄົດ.

ຂະນະທີ່ເຈົ້ານະໂຣດົມ ຂັດຄ້ານຂໍ້ຕົກລົງເກືອບໝົດທຸກຂໍ້ ທີ່ຈະຫລຸດຜ່ອນເອກະລາດດ້ານພາສີ ອາກອນຂອງພະອົງລົງນັ້ນ, ບົດບັນຍັດກ່ຽວກັບຕາດິນ ແລະຂ້ອຍຂ້າ ກໍໄດ້ຕັດຜ່ອນຜົນປະໂຫຍດຂອງພວກ ເຈົ້າຂຸນມູນນາຍຂັ້ນແຂວງ ເຊິ່ງຕັ້ງແຕ່ໃດມາບໍ່ເຄີຍຖືກກະທົບກະເທືອນ ຍ້ອນການເຂົ້າມາຂອງພວກຝຣັ່ງ ຈັກເທື່ອ. ໃນຕົ້ນປີ 1885 ຊົນຊັ້ນນຳຂັ້ນແຂວງ ໄດ້ຍົວະຍົງໃຫ້ກໍ່ຂະບົດຕໍ່ຝຣັ່ງ. ຄວາມເປັນປໍລະປັກກັນ ດຳເນີນມາເຖິງ ທ້າຍປີ 1886 ເມື່ອຝຣັ່ງຕົກລົງເລື່ອນການປະກາດໃຊ້ ພະລາຊະໂອງການ ທີ່ຍັງຂັດແຍ່ງ ກັນຢູ່ນັ້ນອອກໄປ. ບົດບາດຂອງເຈົ້ານະໂຣດົມ ໃນການກໍ່ຂະບົດນັ້ນ ຍັງເປັນເລື່ອງໜ້າສົງໄສຢູ່ ແຕ່ສ່ວນທີ່ ສະແດງໂດຍ ພະອະນຸຊາຂອງພະອົງ ຄື ເຈົ້າສີໂສວັດ ໃນການຊ່ວຍເຫລືອພວກຝຣັ່ງ ຜາບຂະບົດນັ້ນ ເປັນທີ່

ຮູ້ຈັກກັບທົ່ວໄປ. ທັງກ່ອນ ແລະພາຍຫລັງເຫດການປີ 1884-1886 ຝຣັ່ງບໍ່ໄດ້ອຳນັງ ຄວາມຈິງທີ່ວ່າ ພວກເຂົານິຍົມຊົມຊອບ ສີໂສວັດ ກວ່າ ນະໂຣດົມ ແລະຜູ້ປະຈຳການສູງສຸດຝຣັ່ງຄົນນຶ່ງ ໃນຊຸມປີ 1890 ໄດ້ພະຍາຍາມສຸດຂີດ ທີ່ຈະປະກາດວ່າ ນະໂຣດົມ ບໍ່ເໝາະສົມ ໂດຍມີຈຸດໝາຍເລັ່ງລັດໃຫ້ ສີໂສວັດ ຂຶ້ນ ຄອງບັນລັງແທນ. ຫລັງຈາກ ນະໂຣດົມ ສະຫວັນນະຄົດໃນປີ1904, ເຈົ້າສີໂສວັດ ໄດ້ຂຶ້ນຄອງບັນລັງແທນ ເຖິງແມ່ນວ່າ ພະເຊດຖາຂອງພະອົງ ຈະສະຫວັນນະຄົດໄປແລ້ວ ແຕ່ພະອົງຍັງ ຊົງ ເກງກົວຫລາຍເກີນໄປ ທີ່ຈະຈັດການເລື່ອງພະລາຊະພິທີຖວາຍພະເພີງ. ຫລັງຈາກພິທີລາຊາພິເສກ ແລ້ວບໍ່ດົນ, ໃນປີ 1906 ເຈົ້າ ສີໂສວັດ ໄດ້ສະເດັດປະພາດຢ້ຽມຢາມ ປະເທດຝຣັ່ງ, ຊາວເມືອງປາຣີ ໄດ້ສະແດງຄວາມຊື່ນຊົມພໍໃຈ ໃນ ກິລິຍາ ອັນສຸພາບ ມີສຳມາຄາລະວະ ຂອງພະອົງຫລາຍ.

ລະຍະ 40 ປີ ທຳອິດຂອງຝຣັ່ງ ຢູ່ໃນກຳປູເຈຍ ຕົກຢູ່ລັດຊະສະໄໝຂອງພະເຈົ້ານະໂຣດົມ, ພວກ ຝຣັ່ງ ໄດ້ມ້າງເພສະຖາບັນກຳປູເຈຍ ໄປຈຳນວນຫນ້ອຍຫນຶ່ງ, ໄດ້ບູລະນະປະຕິສັງຂອນໄວ້ບາງຢ່າງ ແລະ ໃນວົງຈຳກັດໄດ້ບີບບັງຄັບໃຫ້ຫລາຍໆສະຖາບັນຢູ່ ຕົວຢ່າງ ປະເພນີການປົກຄອງຕົນເອງຂັ້ນແຂວງ, ຂໍ້ຜູກ ພັນດ້ານຫນີ້ສິນ ແລະການເຮັດສົງຄາມລະຫວ່າງລາຊະວົງ ຄ່ອຍໆຫລຸດຜ່ອນລົງ ຂະນະທີ່ກົງຈັກ ໃນການ ເກັບພາສີ, ການຜູກຂາດຂອງເຈົ້າ ແລະການບໍລິຫານວຽກງານຢູ່ພະລາຊະວັງ ໄດ້ຮັບການກໍ່ຕັ້ງຄືນໃຫມ່ ເພື່ອຕອບສະຫນອງຄວາມຕ້ອງການຂອງຝຣັ່ງ. ໃນອີກດ້ານນຶ່ງ ຄະນະສົງ, ລະບົບຍຸຕິທຳໃນທ້ອງຖິ່ນ, ການ ສຶກສາຂັ້ນບ້ານ ແລະການປົກຄອງຂອງກະສັດທີ່ບໍ່ຮັດກຸມ, ຕົວຢ່າງເລັກໆນ້ອຍໆ ຄືສີ່ກໍລະນີນີ້ຊ້ຳ ໄດ້ຮັບ ອະນຸຍາດໃຫ້ດຳເນີນການຢ່າງບໍ່ມີການແຕະຕ້ອງໃດໆ. ໃນທາງກົງກັນຂ້າມ ຂະນະທີ່ຝຣັ່ງ ຫລຸດອຳນາດ ຂອງເຈົ້າຊີວິດລົງນັ້ນ, ການເຂົ້າມາຢູ່ຂອງພວກເຂົາ ກໍນຳເອົາຄວາມຫມັ້ນຄົງມາສູ່ ອານາຈັກຂອງພະອົງ ອັນເຮັດໃຫ້ກຽດສັກສີຂອງພະອົງທະວີຄູນຂຶ້ນເລື້ອຍໆ. ດັ່ງຕົວຢ່າງ ເງິນໃຊ້ຈ່າຍປະຈຳປີ ທີ່ຝຣັ່ງ ອະນຸມັດ ໃຫ້ຈ່າຍແກ່ເຈົ້ານະໂຣດົມ ຈາກພາສີທ້ອງຖິ່ນ ເຊິ່ງບາງເທື່ອອາດຈະຫລາຍກວ່າ ພາສີອາກອນ ຂອງເຈົ້າ ຊີວິດກຳປູເຈຍອົງໃດໆໃນສະໄໝສະຕະວັດ ທີ 19 ຊ້ຳອີກ. ຢ່າງໃດກໍດີ ເຖິງວ່າໃນຄວາມເປັນຈິງແລ້ວ ເຈົ້າ ນະໂຣດົມເປັນຕົວປະກັນຂອງຝຣັ່ງ, ພວກເຂົາກໍບໍ່ໄດ້ພະຍາຍາມດັບມອດ ລັກສະນະທາງພິທີກຳ ແລະທາງ ສາສະຫນາແຫ່ງລາຊະວົງກຳປູເຈຍ ເຊິ່ງໃນຕົວຈິງເປັນສິ່ງນຶ່ງ ທີ່ຜູກພັນ ເຈົ້ານະໂຣດົມ ເຂົ້າກັບປະຊາຊົນ ຂອງພະອົງໄດ້ໂດຍກົງ. ດ້ວຍການຫລຸດຜ່ອນເສລີພາບ ໃນພາກປະຕິ ບັດລົງ, ຝຣັ່ງ ໄດ້ທະວີປະສິດທິພາບ ຂອງສະຖາບັນກະສັດກຳປູເຈຍ ໃຫ້ກາຍເປັນສະຖາບັນນຶ່ງ ທີ່ກ້າວໄປຫນ້າໄດ້. ໃນປີ 1907 ເມື່ອສະຫຍາມ ສົ່ງແຂວງພະຕະບອງ ແລະສຽມຣຽບ ຄືນໃຫ້ແກ່ກຳປູເຈຍ ໃນອາຮັກຂາຂອງຝຣັ່ງນັ້ນ, ລາຊະອານາຈັກ ຈຶ່ງໄດ້ມີເຂດແດນເຕັມຂະຫນາດ ຄືທີ່ມີຢູ່ໃນປະຈຸບັນ ໄດ້ມີການປັ່ງປຸ່ງຊາຍແດນແດ່ເລັກນ້ອຍ ຈົນເຖິງຊຸມປີ 1930, ສ່ວນຫລາຍແມ່ນຝຣັ່ງເປັນຜູ້ເຮັດແຕ່ຝ່າຍດຽວ ໂດຍບໍ່ໄດ້ເປີກສາກັບເຈົ້າຊີວິດກຳປູເຈຍ ຫລື ລັດຖະ ບານຂອງພະອົງ ເຊິ່ງຫນ້າທີ່ຕ່າງໆໄດ້ຫລຸດລົງ ເຫລືອສະເພາະແຕ່ອັນທີ່ກ່ຽວກັບພິທີກຳ ແລະການ ບໍລະຫານຂັ້ນແຂວງ.

## ປະເທດລາວ

ດິນແດນຫົວຫນ່ວຍການເມືອງທີ່ເອີ້ນວ່າ ປະເທດລາວ ມີຄວາມຫມາຍເປັນເທື່ອທຳອິດ ໃນປະ ຫວັດສາດວ່າ ແມ່ນດິນແດນທາງຝັ່ງຕາເວັນອອກທັງຫມົດຂອງແມ່ນ້ຳຂອງ ເຊິ່ງເຄີຍໂຮມກັນເປັນປຶກ ແຜ່ນຄັ້ງທຳອິດ ມາແຕ່ ປີ 1693 ໂດຍມີ 3 ເມືອງ ໃນ 4 ຫົວເມືອງໃຫຍ່ ປົກຄອງໂດຍຝຣັ່ງ (ບໍ່ມີເຈົ້າເມືອງ ປົກຄອງ) ໄດ້ກໍ່ຕົວຂຶ້ນເປັນລັດໃຫມ່ລັດນຶ່ງ ໃນພາກພື້ນອາຊີຕາເວັນອອກສຽງໃຕ້ ໂດຍມີເສັ້ນຂອບເຂດ ສີ່ມຸດທີ່ສ່ວນໃຫຍ່ ຝຣັ່ງພາ ແຕ້ມຂຶ້ນເອົາເອງ.

ຈົນມາເຖິງເວລາສົງຄາມໂລກຄັ້ງທີສອງສ້ຽງສຸດລົງ, ປະເທດລາວຖືກປົກຄອງພາຍໃຕ້ການຈັດ ການຕາມຄວາມພໍໃຈຂອງຝຣັ່ງ. ໃນພາກເໜືອ ເມືອງໃນອາຣັກຂາ ຫລວງພະບາງ ແມ່ນແຫ່ງດຽວທີ່ມີ ເຈົ້າຊີວິດ ສີສະຫວ່າງວົງ ຢູ່ປົກຄອງມາແຕ່ປີ 1905 ຈົນເຖິງປີ1959 ເມື່ອພະອົງສະຫວັນນະຄົດແລ້ວ ກໍຍັງຢູ່ພາຍ ໃຕ້ການປົກຄອງແບບທາງອ້ອມຂອງຝຣັ່ງ. ອີກສາມຫົວເມືອງໃຫຍ່ຂອງລາວຄື ຊຽງຂວາງ, ວຽງຈັນ ແລະຈຳປາສັກ ນັ້ນ ຝຣັ່ງປົກຄອງໂດຍກົງ. ຮູບແບບການປົກຄອງທັງສອງ ຕົກຢູ່ໃນກຳມືຄົນ ຝຣັ່ງປະຈຳການ ຢູ່ວຽງຈັນ.

ການປົກຄອງຂອງຝຣັ່ງໃນລາວ ຕາມທີ່ເປັນຢູ່ນັ້ນ ມີລັກສະນະຜ່ອນເບົາ ເພາະມີການຮ່ວມມືກັບ ພວກອາດຍາເຈົ້ານາຍເກົ່າ, ການມີສ່ວນຫຍຸ້ງກ່ຽວດ້ານເລັກນ້ອຍໃນເລື່ອງເສດຖະກິດຂອງຝຣັ່ງເອງແຕ່, ຄວາມໂດດດ່ຽວຂອງປະເທດ ແລະຄວາມວ່ານອນສອນງ່າຍຂອງປະຊາຊົນລາວນຳ. ນະວະນິຍາຍຝຣັ່ງ ທັງຫລາຍກ່ຽວກັບປະເທດລາວ ວົນວຽນຢູ່ລະຫວ່າງຄວາມອອນຊອນຊົມຊື່ນ ກັບຄວາມເຫລື້ອມໃສສັດທາ ໂດຍບໍ່ມີການຊີ້ບອກວ່າ ສຳລັບຄົນຝຣັ່ງອ້ອຍຕ້ອຍຜູ້ນຶ່ງນັ້ນ ວັນເວລາຂອງເຂົາສ່ວນໃຫຍ່ ໄດ້ຫມົດໄປກັບ ເລື່ອງວຽກງານບໍລິຫານ ຫລືໃດ. ໃນດ້ານການເງິນ, ການບໍລິຫານດຳເນີນໄປແບບຂາດທຶນ, ດຸ່ນດ່ຽງດ້ວຍ ຜົນກຳໄລຈາກກິດຈະການ ໃນກຳປູເຈຍ ແລະຈາກອົງປະກອບອື່ນຈາກຫວຽດນາມ. ມາເຖິງປີ 1943 ມີຄົນ ຫນ້ອຍກວ່າ 30,000 ຄົນ ໃນຈຳນວນປະຊາຊົນທັງຫມົດປະມານຫນຶ່ງລ້ານຄົນຂອງປະເທດ ດຳລົງຊີວິດ ໃນຕົວເມືອງ ຕາມແຂວງຕ່າງໆ ນັບທັງໃນກະໂຕເມືອງຫລວງ ໃນນັ້ນ ປະມານ 2 ສ່ວນສາມ ແມ່ນຊາວ ອົບພະຍົບມາແຕ່ຫວຽດນາມ. ເຊັ່ນດຽວກັນກັບໃນກຳປູເຈຍ ພວກຝຣັ່ງເຂົ້າມາທັນເວລາ ຖືວ່າລາວຫນີອອກ ຈາກການອາຣັກຂາຂອງສະຫຍາມ, ຝຣັ່ງ ຊື້ເວລາໂດຍການແຕ້ມຂີດເສັ້ນໃສ່ແຜນທີ່, ບັງຄັບເຈົ້າຊີວິດ ຫລວງພະບາງໃຫ້ຢູ່ກັບທີ່ ແລະສະແຫວງຫາຄວາມຖືກຕ້ອງ ຈາກບຸກຄົນສຳຄັນທີ່ເປັນຊົນຊັ້ນນຳຂອງທ້ອງ ຖິ່ນ ເພື່ອຜົນປະໂຫຍດຂອງລາວ ແລະຂອງຝຣັ່ງເອງ ເພື່ອດຳເນີນເລື່ອງໄປແບບຊ້າໆ ໃນສິ່ງທີ່ພວກເຂົາ ເຫັນວ່າ ແມ່ນພາລະກິດສ້າງຄວາມວິສີໄລຢູ່ນະທີ່ນັ້ນ ແລະຢູ່ແຫ່ງອື່ນໆໃນອິນດູຈີນ.

## ເກາະດອນ ອາຊີຕາເວັນອອກສຽງໃຕ້

ລະຫວ່າງປີ 1870 ແລະ 1910 ຂະບວນການທາງການເມືອງອັນໂດດເດັ່ນ ກ່ຽວກັບການ ເຕົ້າໂຮມ ແລະການຈັດຕັ້ງພາຍໃນຄືນໃຫມ່ ສ່ວນຫລາຍກໍເປັນໄປແບບດຽວກັນ ທັງທີ່ຢູ່ໃນເກາະດອນ ແລະເທິງ ຜືນແຜ່ນດິນໃຫຍ່ອາຊີຕາເວັນອອກສຽງໃຕ້. ແຕ່ຜົນຮັບປາກົດຈະແຈ້ງອອກມາໃນແຜນທີ່ ເພາະໃນປີ 1870 ການຂະຫຍາຍຕົວ ທາງພູມສາດ ຂອງຫມູ່ເກາະດອນ ຍັງບໍ່ໄດ້ຖືກລະບາຍສີ ເປັນຂອງຈັກກະພັດ ໃດໆເທື່ອ. ແຜນທີ່ນັ້ນປະກອບດ້ວຍ ໂລກທັງຫມົດຂອງສັງຄົມນ້ອຍໆແລະ ນິເກຣິ(negeri) ໂດຍສະເພາະແລ້ວ ແມ່ນ ສັງຄົມມາເລ-ມຸສະລິມ ທີ່ຍັງປອດໃສ ແລະໄດ້ດຳເນີນປະຫວັດສາດຂອງຕົນ ໄປອີກແບບນຶ່ງ. ພື້ນທີ່ດັ່ງກ່າວ ມີອັນຄ້າຍຄືກັນກັບຫົວເມືອງໃນລັດສານ ແລະໃນລາວເບື້ອງໃນຂອງແຜ່ນດິນໃຫຍ່ ທີ່ມີທັງແບ່ງແຍກຈາກ ກັນທາງການເມືອງ ແລະປົກຄອງຕົນເອງ ແຕ່ລາມຢຽດອອກໄປກວ້າງໄກຫລາຍ, ມີພົນ ລະເມືອງຫລາຍ ກວ່າຫມູ່ແທ້ໆ ແລະອີງຕາມເຫດການ ທີ່ເກີດຂຶ້ນ, ຫມູ່ເກາະດອນກຫລ່ຳນີ້ ມີຄວາມສາ ມາດບົ່ມຊ້ອນ ທາງເສດຖະກິດຍິ່ງໃຫຍ່ກວ່າ. ແຜ່ນດິນອ້ອມຂ້າງພື້ນທີ່ອັນກວ້າງໃຫຍ່ແຫ່ງນີ້ ບໍ່ເປັນແຜ່ນດິນ ຂອງຜູ້ໃດ ຫລືບາງບ່ອນກໍມີຫຼາຍເຈົ້າຂອງ ເປັນລັດທີ່ເຂັ້ມແຂງທີ່ສຸດໃນໝູ່ເກາະດອນ: ດັຊ ຊະວາ ທີ່ມີປະຊາກອນ ຫລວງຫລາຍກວ່າຫມູ່ຫມົດໃນອາຊີຕາເວັນອອກສຽງໃຕ້, ບໍ່ວ່າຈະແມ່ນ ຫມູ່ເກາະດອນຟິລິບປິນ ຄາໂທລິກ ເຊິ່ງມີຕົວແທນ ທັງກອງທັບເຮືອ ແລະອຳນາດທາງການຄ້າ ຕັ້ງຖິ່ນຖານ ຢູ່ຮອງ ແຄບອັງກິດ.

ລັດທີ່ກວ້າງໃຫຍ່ກວ່າໃນແຜ່ນດິນໃຫຍ່ ເຄີຍມີຂອບອິດທິພົນການເມືອງ ກວມຢູ່ໃນໂລກ ຂອງ ລັດສານ ແລະ ລາວ ມາແລ້ວຢ່າງໃດ, ອັງກິດ ແລະໂຮນລັງ ກໍມີອຳນາດທາງກອງທັບເຮືອ ອັນມະຫາ ສານ ມາແຕ່ດົນນານແລ້ວເຊັ່ນກັນ ຢູ່ໃນໝູ່ເກາະດອນ ແລະທັງອັງກິດ ທັງໂຮນລັງ ພ້ອມ ດ້ວຍສະເປນ ກໍຍັງຄົງຮັກສາວົງຂອບອິດທິພົນຂອງພວກເຂົາຢູ່ທີ່ນັ້ນໄວ້. ວົງຂອບອິດທິພົນເຫລົ່ານີ້ຂະ ຫຍາຍຕົວຢ່າງ ຈະແຈ້ງຍິ່ງຂຶ້ນ ໃນລະຍະເຄິ່ງສະຕະວັດກ່ອນ 1870. ສັງຄົມນ້ອຍໆ ແລະ ນິເກຣິ ພາຍໃນວົງຂອບອິດທິພົນ ແຕ່ລະວົງ ທັງທີ່ເປັນລັດບໍລິວານ, ພັນທະມິດ ແລະເຫຍື່ອ ກໍຖືກມະຫາອຳນາດຜູ້ຍິ່ງໃຫຍ່ ຫນີບຕັ້ງຢູ່ອ່າວ ຮຸນແຮງແດ. ເຖິງຢ່າງໃດກໍດີ ຄືກັນກັບຢູ່ແຜ່ນດິນໃຫຍ່, ດິນແດນເຫລົ່ານີ້ ຍັງຄົງເປັນ ເຂດອິດທິພົນຢູ່ ແລະ ເປັນອິດທິພົນທີ່ເຂັ້ມແຂງເທົ່າໆກັບກອງລາດຕະເວນ ຫນ່ວຍເຄັ່ງຄັດ ຫລື ຜູ້ທີ່ເອກອ້າງຄວາມກະຕັນຍູ ຮູ້ບຸນຄຸນຜູ້ຫລ້າສຸດ ໃນການຊ່ວຍໃຫ້ຂຶ້ນສູ່ບັນລັງ.

ປະມານປີ 1870 ຫລື ອາດກ່ອນນັ້ນ ໃນກໍລະນີຂອງສະເປນ ມະຫາອຳນາດຈັກກະພັດເລີ່ມຫນີບຄັນ ນິເກຣິ (ເມືອງນ້ອຍກວ່າຫມູ) ພ້ອມທັງປະຊາຊົນທີ່ຢູ່ອ້ອມຂ້າງນັ້ນ ຫນັກຫນ່ວງຂຶ້ນ. ພາຍໃນບໍ່ເທົ່າໃດ ສະຕະວັດ ພວກເຂົາໄດ້ແບ່ງໂລກແຫ່ງເກາະດອນທັງຫມົດອອກເປັນປ່ຽງໆ ແລະໄດ້ບໍລິຫານຄວບຄຸມພື້ນທີ່ ທັງຫມົດ ຢ່າງມີປະສິດທິພາບ ຍົກເວັ້ນ 2-3 ບ່ອນຟາກໃນຂອບເຂດຊາຍແດນໃຫມ່. ມັນແມ່ນຫົວຄິດ ປະດິດສ້າງນຶ່ງດ້ານການເມືອງ ເພື່ອຄວາມສຳເລັດທັງຫລາຍ ສາມຊາດໃຫຍ່ ໃນຫມູ່ເກາະດອນອາຊີ ຕາເວັນອອກສຽງໃຕ້ ຈຶ່ງມີຊື່ແບບເອີຣົບ ຫລາຍກວ່າຊື່ທ້ອງຖິ່ນດັ້ງເດີມ. ການປ່ຽນ ແປງພາຍຫລັງປີ 1870 ມີຄວາມສຳຄັນຫນ້ອຍທີ່ສຸດ ສຳລັບຫມູ່ດອນຟິລິບປິນ, ມັນໄດ້ຮັບຊື່ເປັນພາສາ ສະເປນ ແລະຮັບເອົາ ຫລັກເກນສາສະຫນາຄາໂທລິກ ຢູ່ດອນລູຊອນ ແລະບິສາຍະ ໃນສະຕະວັດທີ 16, ສ່ວນທີ່ຕື່ມເຂົ້າ ມີແຕ່ຂົງ ເຂດນ້ອຍໆຂອງມຸສະລິມໃນພາກໃຕ້ ເມື່ອສະຕະວັດທີ 19 ພື້ນທີ່ຄວບຄຸມ ໂດຍ ອັງກິດ ເຊິ່ງໃນຕອນສຸດທ້າຍ ໄດ້ຖືກຫຍິບຕໍ່ເຂົ້າກັນຢ່າງເປັນທາງການ ແລະກາຍມາເປັນ ມາເລເຊຍ ໃນປີ 1963, ກໍແມ່ນການປັ້ນແຕ່ງ ໃຫມ່ອັນນຶ່ງ ແຫ່ງຍຸກອານານິຄົມຂຶ້ນສູງ ໂດຍຕັດອອກຈາກໂລກ ມາລາຢູ-ມຸສະລິມເອງ ຕາມໃຈມັກ. ໃນທີ່ ສຸດ ຢູ່ອ້ອມຮອບໃຈກາງເກົ່າຂອງຊະວາທີ່ກວ້າງໃຫຍ່, ພວກໂຮນລັງ ໄດ້ຕໍ່ແຜ່ນດິນໝູ່ເກາະດອນ ທີ່ຕົນຍຶດ ຄອງ ມີແລວໂຄ້ງກົ່ງຍາວຮອດ 3,000 ໄມ ເຂົ້າກັນເປັນ ເນເທີ ແລນອິນດີສ໌ໃຫມ່ (Nertherkands Indies) ເຊິ່ງກາຍມາເປັນ ອິນໂດເນເຊຍ ລັດກວ້າງໃຫຍ່ທີ່ສຸດ, ມີປະຊາກອນຫລາຍທີ່ສຸດ ແລະວັດທະນະທຳຫລາກ ຫລາຍທີ່ສຸດ ແຫ່ງອາຊີຕາເວັນອອດສຽງໃຕ້ ໃນຍຸກສະຕະວັດທີ 20.

## ອິນດີສຕາເວັນອອກ ຂອງເນເທີແລນ

ຄົງຕ້ອງພິຈາລະນາເບິ່ງລະບົບການເມືອງ ເຊິ່ງມີສູນກາງຢູ່ ບັດຕາເວຽ ຂອງດັຊໃນປີ 1870 ຕາມແບບວິຖີຂອງອາຊີຕາເວັນອອກສຽງໃຕ້ຢ່າງຖີ່ຖ້ວນ, ໃນຖານະເປັນເຂດວົງອິດທິພົນຊຸດນຶ່ງ ເມື່ອຕົ້ນ ສະຕະວັດນັ້ນ, ບັດຕາເວຽ ເອງມີເຈົ້າແຂວງໃຫຍ່ຄວບຄຸມກົນໄກລະບົບຂ້າລາຊະການທີ່ນ້ອຍໆ ແຕ່ຫາກມີ ປະສິດທິພາບ ມີກອງທັບຫລວງ ອິນດີສເນເທີແລນ ທີ່ມີກຳລັງທະຫານ 35.000 ຄົນ ເຝິກແອບມາຢ່າງດີ ແລະມີປະສິດທິພາບ ທັງກຳລັງທະຫານເຮືອທີ່ມີຈຳນວນຫນ້ອຍກວ່າ. ໃຈກາງ ຂອງຊະວາ ປະກອບດ້ວຍ ຊະວາ (ພ້ອມດ້ວຍ ມາດູຣະ) ເຊິ່ງມີປະຊາກອນກວ່າ 17 ລ້ານຄົນ ຖືກ ປົກຄອງເປັນເທື່ອທຳອິດ ໂດຍ ຫນ່ວຍພະນັກງານບໍລິຫານຂັ້ນນຳຄົນໂຮນລັງ(ດັຊ) ທີ່ອາດຈະບໍ່ຫລາຍກວ່າ 100 ຄົນ, ຄຽງຄູ່ກັບພວກເຂົາ ແລະຢູ່ລຸ່ມກວ່າພວກເຂົາ ຍັງມີຊົນຊັ້ນ ປຣິຍາຍິ (priyayi) ທີ່ມີຫລາຍ ກວ່າ ແລະເປັນພະນັກງານນຳພາ ຈາກການເປັນຜູ້ສືບທອດລາຊະການ ປະມານ 80 ຄົນ. ວົງຂອບອິດທິ ພົນຕໍ່ມາ ຢູ່ນອກຊະວາ ປະກອບດ້ວຍ ເຂດແດນຈຳນວນນຶ່ງທີ່ຢູ່ພາຍໃຕ້ການປົກຄອງຂອງໂຮນລັງ ໂດຍກົງ ສ່ວນຫລາຍແມ່ນໝູ່ເກາະດອນຄື ອາມບອນ (Ambon) ແລະຫມູ່ດອນອື່ນໆໃນ ໂມລຸກກາ (Moluccas) ທີ່ບັນລຸເຖິງຍຸກສຸດຍອດ ແຫ່ງການ

ຄ້າຂາຍ ເຄື່ອງຫອມ ໃນສະຕະວັດທີ 17 ແລະ ດອນ ບັງກາ(Bangka) ດິນແດນທີ່ອຸດົມສົມບູນດ້ວຍແຮ່ກົ່ວ ນອກຝັ່ງດອນສຸມາຕຣາກ້ຳໃຕ້ ແລະດິນແດນໃນກາງດອນ ມີນັງ- ກາໂບ ໃນສຸມາຕຣາຕາເວັນຕົກ ເຊິ່ງ ຖືກຍຶດຕີໄດ້ໃນຊຸມປີ 1830 ແລະໃຫ້ຜົນກຳໄລພໍສົມຄວນ ຈາກກາບ ປູກກາເຟ ແບບບັງຄັບ. ໃນທີ່ສຸດ ບັດຕາເວຽ ກໍໄດ້ຄອບຄອງຄວາມເປັນໃຫຍ່ເໜືອຫົວໜ່ວຍ ນິເກຣິ ແລະ ສັງຄົມນ້ອຍໆເກືອບທັງໝົດ ນັບ ຕັ້ງແຕ່ໝູ່ເກາະດອນຂອງ ສຸມາຕຣາ ຮອດ ນິວກີນີ. ມັນແມ່ນຄວາມເປັນໃຫຍ່ເໜືອກວ່າ ທີ່ຮຽກຮ້ອງໃຫ້ ມີການໃຊ້ຈ່າຍແພງເພື່ອກວາດລ້າງຢ່າງຕໍ່ເນື່ອງ ແລະເພື່ອຮັກສາຄວາມເປັນໃຫຍ່ເໜືອກວ່ານັ້ນໄວ້ ແລະ ເລິກແລບໄປກວ່ານັ້ນກໍແມ່ນການຍອມຮັບ ຄວາມເປັນເຈົ້າ ກຳມະສິດ ຂອງພວກໂຮນລັງ ຈາກຜູ້ປົກຄອງ ທ້ອງຖິ່ນທີ່ຍັງຢູ່ໃນຕຳແໜ່ງ.

ກຳເປນີ (Kumpeni) ແມ່ນຊື່ ໃນພາສາທ້ອງຖິ່ນອັນລົ້ງຫູ ຕາມທີ່ບໍລິສັດເກົ່າອິນເດຽ ຕາເວັນ ອອກ ຂອງດັຊ ສະເໜີຂຶ້ນ, ລະບົບການເມືອງອັນກວ້າງຂວາງ ແລະຄອນຫລວງນີ້ ມີລັກສະນະ ເປັນລັດ ແບບອາຊີຕາເວັນອອກສຽງໃຕ້ຫລາຍຫ່ຳກັບດິນແດນຂອງເນເທີແລນ ຟາກທະເລ. ກຳເປນີ ຖືກ ສ້າງຂຶ້ນ ມາຕາມອຳນາດຂອງເນເທີແລນ ແຕ່ອຳນາດຂອງເນເທີແລນ ເຊິ່ງປະຕິບັດການຜ່ານສະຖາບັນ ຕ່າງໆ ຂອງຜູ້ຕົກຢູ່ພາຍໃຕ້ອິດທິພົນຂອງບໍລິສັດ, ດັ່ງນັ້ນ ຈຶ່ງຜ່ານພວກ ປຣິຍາຍີ ຊະວາ ແລະສຸລະຕານ ກັບຫົວ ໜ້າປະຈຳໝູ່ເກາະດອນເຫລົ່ານີ້. ການຈັດຕັ້ງຂອງອົງການພາຍໃນບໍລິສັດ ກຳເປນີ ສະທ້ອນໃຫ້ເຫັນ ຄວາມສຳພັນ ໃນລະຍະສອງສັດຕະວັດ ທັ່ງລະຫວ່າງ ຊາວໂຮນລັງ ແລະປະຊາຊົນໃນດອນຊະວາ ດ້ວຍ ເງື່ອນໄຂທີ່ພວກໂຮນລັງ ພໍໃຈນຳທ່າດີກວ່າແທ້ໆ 2-3 ຂໍ້ ນອກຈາກການຈັດຕັ້ງອົງການທາງການເມືອງ ທີ່ມີປະສິດທິພາບສູງກວ່າ ແລະຮູບແບບແຫ່ງອຳນາດທາງເສດຖະກິດແລະທາງທະຫານ ທີ່ແປກໃໝ່ ເໜືອປະຊາຊົນທ້ອງຖິ່ນທີ່ມີຈຳນວນຫລວງຫລາຍກວ່າຢ່າງຂາດຂັ້ນ. ເຖິງແນວໃດກໍດີ ຫລັງຈາກປີ 1870 ຫມາກຜົນແຫ່ງການປະຕິວັດທາງວິທະຍາສາດ ແລະອຸດສະຫະກຳທີ່ສະສົມມາດົນ ກໍຕັ້ງຕົ້ນປ່ຽນປົ້ນ ມາທຳລາຍຄວາມສະເໜີພາກເກົ່າ ລະຫວ່າງຈຳນວນອົງການຂອງຊາວໂຮນລັງ ແລະຂອງຊາວ ມາເລ ເຊຍ. ກຳເປນີ ເລີ່ມປ່ຽນແປງທາງພາຍໃນ ແລະໃນຂະນະດຽວກັນ ກໍເລີ່ມຂະຫຍາຍເຂດແດນການ ປົກຄອງໂດຍກົງຂອງຕົນຫລາຍຂຶ້ນ ຄືກັນກັບທີ່ທາງບາງກອກ ກຳລັງເຮັດຢູ່ໃນປີດຽວກັນ ສະໄໝເຈົ້າ ຊີວິດຈຸລາລົງກອນ (ຣາຊະການທີ 5). ກອງກຳລັງໃໝ່ ທີ່ປະຕິບັດໜ້າທີ່ຢູ່ໃນເຂດແດນພາຍ ນອກຊະວາ ເມື່ອຊຸມທົດສະວັດສຸດທ້າຍຂອງສະຕະວັດທີ 19 ຖືກແຕ້ມແຕ່ງໄວ້ເປັນຢ່າງດີ ດ້ວຍເຫດການທີ່ ເກີດຂຶ້ນຕິດໆ ກັນສາມແຫ່ງ ຢູ່ສຸມາຕຣາເໜືອ ເຊິ່ງໃນລະຫວ່າງປີ 1870 ຍັງຢູ່ພາຍໃນ ຫລື ຢູ່ຂອບນອກ ຂອງວົງ ອິດທິພົນກຳເປນີ. ຢູ່ໃນໝູ່ຊາວບາຕັກ ດອນໂຕບາ (TOBA BATAKS) ມີປະຊາຊົນເຮັດນາດຳ ຈຳນວນຫລາຍເຕີບທີ່ຢູ່ໃນໃຈກາງຂອງດອນ ບ່ໄກຈາກກ້ຳເໜືອຂອງດອນມີນັງກາໂບ, ການພັດທະນາ ແບບແທ້ຈິງໄດ້ກໍ່ຕົວຂຶ້ນພ້ອມໆ ກັບການມາເຖິງຂອງຄະນະເຜີຍແຜ່ສາສະໜາເຢຣະມັນ ຄື ຄະນະເຜີຍ ແຜ່ ເຣນິຊ໌ (Rhenish Mission) ໃນຊຸມປີ 1860. ຊາວດອນໂຕບາຜູ້ນັບຖືຜີ ຢູ່ດອນ ສຸມາຕຣາ ບ່ອນທີ່ຜູ້ຄົນ ສ່ວນໃຫຍ່ເປັນມຸສະລິມນັ້ນ ກໍໄດ້ຕອບຮັບໂດຍທັນທີ ຕໍ່ເສັ້ນທາງແຫ່ງຄວາມ ຫວັງທີ່ໄຂຂຶ້ນ ໃນກາລະ ໂອກາດນີ້. ມາເຖິງປີ 1900 ປະຊາຊົນ ສ່ວນຫລວງຫລາຍ ໄດ້ຫັນມານັບຖື ສາສະໜາຄຣິດ, ໂດຍຜ່ານ ເສັ້ນທາງນີ້ ຈຶ່ງເກີດມີກຳລັງເຄື່ອນເໜັງໃໝ່ ເຮັດໃຫ້ພວກເຂົາມີບົດບາດສຳ ຄັນຂຶ້ນຢ່າງຜິດປົກກະຕິ ຢູ່ໃນອິນໂດເນເຊຍ ເມື່ອສະຕະວັດທີ 20. ພ້ອມໆກັບການຕື່ນຕົວ ຂອງຄົນພື້ນ ເມືອງນີ້ ລັດປັດຕາເວຽ ເຫັນເປັນໂອກາດດີ ທີ່ຈະຂະຫຍາຍການບໍລິຫານຢ່າງມີລະບົບ ເທິງເຂດດິນ ຂອງດອນໂຕບາ ທັ່ງຫມົດໃນ ຊຸມປີ 1890. ໃນເຂດດິນຕາມຊາຍຝັ່ງທະເລ ເຊິ່ງມີສູນກາງຢູ່ດອນມີດານ (Medan) ປະຈຸບັນ ທາງທິດ ເໜືອຂອງດອນໂຕບາ, ຕົວແທນແຫ່ງການປ່ຽນແປງອັນທຳອິດ ແມ່ນການ ພັດທະນາການປູກຢາດູດ ຂອງພວກດັຊ ພາຍຫລັງປີ 1863. ນະຄອນລັດນ້ອຍໆ ຂອງສຸລະຕານ ໃນເຂດນັ້ນ ຕ້ອງຊື່ສັດພັກດີ ຢ່າງ ໜ້າມືດຕາມົວ ຕໍ່ສຸລະຕານແຫ່ງຊີຢັກ (Sultan of Siak) ຕາມລຽບຊາຍຝັ່ງ ລົງໄປໄກໆ ແລະໃນທາງປົ້ນ ກັນ ເພິ່ນກໍຕ້ອງໄດ້ສະເໜີ ມອບເຄຫະສະຖານຂອງຕົນທັ່ງຫມົດ ໃຫ້ແກ່ ບັດຕາເວຽ ໃນປີ 1858, ນີ້ແມ່ນ

ສູດປະຕິບັດທາງການເມືອງຊະນິດທຳມະດາໆສູດນຶ່ງ ໃນຍຸກຮຸ່ງ ເຮືອງຂອງກຳເປນີ. ແຕ່ຄວາມສຳເລັດ ແລະການຂະຫຍາຍການປູກຝັງຢ່າງວ່ອງໄວ ໄດ້ດຶງດູດຄົນຊາດ ຕ່າງໆເຂົ້າມາ ຄື ຄົນຈີນ ຊະວາ ແລະ ໂຮນລັງ ຈົນມີຫລາຍກວ່າຄົນທ້ອງຖິ່ນ ແລະຜ່ມາເຖິງ ປີ 1900 ພວກສຸລະຕານຖືກຍັດ (ດ້ວຍເງິນລາຍ ຮັບ)ຄົນພາຍນອກຈຶ່ງ ແລະແຜ່ຂຶ້ນມາກະຈາຍເຖິງບ່ອນທີ່ ໃນປະຈຸບັນ ກາຍເປັນຊາຍຝັ່ງຕາເວັນອອກ ເຂດ ບໍລິຫານໂດຍ ຊາວດັຊ ປະຈຳຢູ່ດອນສຸມາຕຣາ.

ຄວາມພະຍາຍາມອັນສຳຄັນທີ່ສຸດ ໃນປາຍສະຕະວັດທີ 19 ຂອງ ບັດຕາເວຽ ໃນເລື່ອງການຂະ ຫຍາຍກຳລັງທະຫານໂດຍກົງອອກຈາກຫມູ່ເກາະດອນຊະວາ ຢູ່ໃນດິນແດນອັນກວ້າງໃຫຍ່ ແລະເປັນລັດ ອິດສະຫລະ ຂອງສຸລະຕານແຫ່ງອາເຈ ທາງກ້ຳເໜືອສຸດຂອງສຸມາຕຣາ ຕະຫລອດເວລາອັນຍາວນານ ນັ້ນ ບ່ຄ່ອຍປະສົບຄວາມສຳເລັດເປັນທີ່ປະຈັກຕາພໍເທົ່າໃດ. ຄວາມພະຍາມກ່ແຣກຂຶ້ນເມື່ອປີ 1873 ເຊິ່ງ ຖືວ່າ ເປັນຍິ່ງກວ່າການກວາດລ້າງຢ່າງກະທັນຫັນໂດຍກຳເປນີ ທັງນີ້ຍ້ອນຢ້ານກົວຕ່ການຊ່ວງ ເສັງຂອງ ອັງກິດ ແລະໂດຍມີຈຸດຫມາຍພຽງຢ່າງດຽວ ຄືສິ່ງເສີມຄວາມຂຶ້ນຕ່ຂອງລັດທ້ອງ ຖິ່ນ ນອກການປົກຄອງ. ໄດ້ພິສູດກັນມາຢ່າງງ່າຍໆແລ້ວວ່າ ເມື່ອຍຶດເອົາເມືອງຫລວງໄດ້ແລ້ວ ຈຶ່ງໃຊ້ລະຍະນຶ່ງ ເພື່ອຫັນເອົາ ສຸລະ ຕານ ມາເປັນບໍລິວານ ແຕ່ຄືດັ່ງທີ່ເກີດຂຶ້ນໃນເຂດພູດອຍຂອງພະມ້າ ແລະຫວຽດນາມພາກເໜືອ ພາຍ ຫລັງປີ 1885, ການເຄື່ອນໄຫວນັ້ນ ພໍພຽງແຕ່ໄຂຫົນທາງ ໃຫ້ຫົວໜ້າ ຂັ້ນນ້ອຍ ແລະຄົນທ້ອງຖິ່ນ ລົງມືກະ ຈາຍການຕ່ຕ້ານແບບກອງໂຈນອອກໄປທົ່ວ. ຕາມຄວາມຈິງແລ້ວ ໃນລະຍະເວລາ 25 ປີຕ່ມາ ກອງກຳລັງ ຂອງໂຮນລັງ ເປັນຝ່າຍຖືກຕ່ຕ້ານສະເໜມີມາ ແລະພວກອາເຈ ກໍເບິ່ງຄືວ່າ ໃກ້ເຖິງຈຸດແຫ່ງໄຊຊະນະ ຢູ່ ແລ້ວ. ສົງຄາມອາເຈ ແມນ "ສົງຄາມຂອງພວກດັຊ" ສຳລັບຊາວ ອາເຈ ແນ່ນອນວ່າມັນເກືອບເຮັດໃຫ້ ບັດ ຕາເວຽ ຫລົ້ມຈົມໄປ ແລະໄດ້ຜູກມັດກອງທະຫານ ນ້ອຍໆຂອງ ບັດຕາເວຽໄວ້ ແລະດ້ວຍວິທີການອັນນີ້ ຈຶ່ງ ປ້ອງກັນການຂະຫຍາຍອຳນາດ ແບບວ່ອງໄວ ຂອງ ບັດຕາເວຽ ໄດ້ ແມ່ນແຕ່ຢູ່ໃນຫມູ່ເກາະດອນອື່ນໆ ໃນລະຍະນັ້ນ.

ຢູ່ນອກ ຊະວາ ໃນລະຍະທົດສະວັດສຸດທ້າຍຂອງສະຕະວັດທີ 19, ການປ່ຽນແປງບ່ໄດ້ເກີດຂຶ້ນ ທົ່ວໄປ ຫລື ເປັນຮູບແບບດຽວກັນຫມົດ ແຕ່ຖືກຈຳກັດຢູ່ໃນບາງຂົງເຂດເທົ່ານັ້ນ ເຊັ່ນ ສຸມາຕຣາເໜືອ. ຂອບວົງອິດທິພົນຮອບນອກຂອງ ກຳເປນີ ສ່ວນຫລາຍຍັງຄົງສຳຄັນຢູ່ ຄືດັ່ງທີ່ເຄີຍເປັນຢູ່ໃນປີ1870 ຫລື ແມ່ນແຕ່ໃນສະຕະວັດ ທີ 17. ຂະນະດຽວກັນ, ຢູ່ດອນຊະວາ ການເຄື່ອນໄຫວລົບລ້າງລະບົບສືບທອດຕຳ ແໜ່ງຕາມສາຍພ່ ແບບຊະວາ/ດັຊ ເຊິ່ງແຣກກ່ມາແຕ່ກ່ອນສະໄໝຂອງ ດິນແດລ ກັບ ຣາບເຟີ (Daendels and Raffles) ແລ້ວກໍ ກັບປີ້ນຄືນໃນຊຸມຕົ້ນໆປີ ສະໄໝລະບົບວັດທະນະທຳຂອງ ວັນ ແດນ ໂບດຊ໌ (van den Bosch) ເກີດມີຜົນ ຢ່າງຈິງຈັງ. ໃນຂະນະທີ່ ອຸດສາຫະກຳສິ່ງອອກ ພວມເບ່ງບານ (ນ້ຳຕານ ຈາກທົ່ງຣາບ, ເຊິ່ງບັດນີ້ ຢູ່ໃນກຳມືເອກະຊົນ ແລະໃບຊາຈາກເຂດພູດອຍ, ກາເຟ ແລະການ ປູກຝ່ນ), ການສ້າງທາງລົດໄຟ (150 ໄມລ ໃນປີ 1873, 1200 ໄມລ ໃນປີ 1900) ການອອກໜັງສືພິມ, ການສື່ສານດ້ວຍໂທລະເລກ ແລະການທະນາຄານແບບສະໄໝໃຫມ່, ການຕັ້ງສະມາຄົມຕາມສາຍພ່ ແບບເກ່ໆ ອັນແສນສະບາຍ ໃນຊຸມຊົນປຣິຢາຍິ ກັບຊາວໂຮນລັງ ເລ່ມຫມົດຄວາມຫມາຍລົງ. ຢູ່ໃນໂລກ ສະໄໝທີ່ ອັດຊະມາດ ດະຈາດິນິນກຣາດ (Achmad Djajadiningrat) ຖືກຳເນີດເມື່ອປີ 1877 ນັ້ນ, ໃນ ບັນຕັມ ຜູ້ສຳເລັດລາຊະການປະຈຳຊີຣາງ (Serang) ຖືກເບ່ງວ່າເປັນຄື ນິເກຣິນຶ່ງ, ເມື່ອຍັງນ້ອຍ ເຂົ້າ ເປັນຄົນຮັບໃຊ້ ທີ່ໄດ້ນຸ່ງເຄື່ອງແບບຢູ່ໃນວັງຂອງຜູ້ເປັນລຸງ ຊຶ່ງເປັນຜູ້ສຳເລັດລາຊະການ ແລະໄດ້ຮັບການ ເຝິກອົບຮົມດ້ານສິນທັມອັນເກ່ໆຂອງ ປຣິຢາຍິ ຊະວາ, ໃນປີ 1901 ເຂົ້າຖືກເອີ້ນໄປເຮັດວຽກ ເພາະໄດ້ຮັບ ການສຶກສາຜ່ານພາສາດັຊ ແລະກໍຈັດແຈງເອົາຕົນເອງເຂົ້າເປັນນຶ່ງໃນບັນດາຊົນຊັ້ນຜູ້ສຳເລັດລາຊະການ ຮຸ່ນໃຫມ່, ໂດຍບ່ໄດ້ເປັນຂຸນນາງຂອງນິເກຣິ ອີກຕ່ໄປ. ບາງທີ ອາດຈະຍົກເວັ້ນແດ ເວລາຢູ່ຕ່ໜ້າພວກຊາວ ນາລູກນ້ອງຕົນເອງ ແຕ່ກໍຫາກເປັນສະມາຊິກຂອງຊົນຊັ້ນນຳຊົນຊັ້ນນຶ່ງ ຄືພະນັກງານຊະວາ ໃນຊະວາ ທົ່ວ ໄປ. ໃນຍຸກຂອງເຂົ້າ ອັດຊະມາດ ດະຈາດິນິນກຣາດ ເປັນບຸກຄົນຊັ້ນນຳຫນ້າຜູ້ນຶ່ງ, ແຕ່ໃນຊຸມປີ 1860,

ຜູ້ສຳເລັດລາຊະການກັບພະນັກງານໂຮນລັງ ໄດ້ສູນເສຽ "ເປີເຊັນ ຈາກການປູກຝັງ ຂອງພວກ ເຂົ້າໄປ"; ໃນປີ 1874 ພະແໜນການບໍລິຫານຄຽງຄູ່ຂອງຄົນເອີຣົບ ກັບຄົນພື້ນເມືອງ ໄດ້ຮັບການຈັດຕັ້ງຄືນ ແລະສັບຊ້ອນໃຫມ່, ໃນປີ 1882 ຜູ້ສຳເລັດລາຊະການ ຖືກຕັດສິດໃນການຮຽກໃຊ້ແຮງງານຊາວນາ ເພື່ອວຽກງານສ່ວນຕົວ. ຊາວດັຊ ຕາງດ້າວແລະພະນັກງານອື່ນໆ ຍັງຄົງຮັກສາການຫມາຍເຄື່ອງແບບສະແດງຖານະສືບເຊື້ອສາຍພໍ່ໄວ້ລະຍະນຶ່ງ ແຕ່ພວກເຂົາ ກໍຫັນໄປເຮັດວຽກກ່ຽວກັບເອກະສານຫລາຍຂຶ້ນ ແລະພັດທະນາຜະແໜນການບໍລິການໃຫມ່ໆຂຶ້ນ ເຊັ່ນ ວຽກດ້ານຊົນລະປະທານ ແລະປ່າໄມ້. ຜູ້ສຳເລັດລາຊະການ ແລະ ປຣິຢາຍີ ຫົວເກົ່າ ໄດ້ກາຍເປັນເຄື່ອງປະດັບປະດານັບມື້ນັບຫລາຍຂຶ້ນ ຂະນະທີ່ພະນັກງານຄົນດັຊ ໄດ້ເປັນຜູ້ຮັບຜິດຊອບດຳເນີນວຽກງານບໍລິຫານອັນທັນສະໄຫມຍິ່ງກວ່າເກົ່າ. ກະແສຟອງໃຫມ່ແຫ່ງການປ່ຽນແປງ ແຮກກ່ຶ້ນໃນຊະວາ ຫລັງຈາກປ່ຽນສະຕະວັດແລ້ວ ໃນຊຸມປີທຳອິດ ແຫ່ງໄຊຊະນະຂອງ "ນະໂຍບາຍດ້ານສິນລະທັມ". ຢູ່ໃນນັ້ນ ປາກົດມີການສຶກສາເປັນພາສາດັຊ ແຮກກ່ຶ້ນ ສຳລັບພວກປຣິຢາຍີ ທັງຫມົດ ແລະການນຳໃຊ້ຫລັກການບໍລິຫານສະໄຫມໃຫມ່ ໄດ້ແຊກຊຶມເຂົ້າເຖິງຂັ້ນບ້ານ. ປັດໄຈອື່ນໆ ຫລາຍຢ່າງທີ່ເຮັດໃຫ້ເກີດການປ່ຽນແປງໃນຊະວາ ແລະເອື້ອອຳນວຍໃຫ້ແກ່ ການເຄື່ອນໄຫວແບບຈັກກະພັດແນວໃຫມ່ຢູ່ໃນຫມູ່ເກາະດອນ ຂະຫຍາຍອອກນອກດອນໄປ ບ່ອນທີ່ການບຸກຮຸກຂອງພວກດັຊ ໃນລະຍະທ້າຍສະຕະວັດທີ 19 ຖືກສະກັດດ້ວຍສົງຄາມອາເຈນັ້ນ ກໍໄດ້ ຖືກນຳມາຕົກລົງກັນຢ່າງໄວວາ. ເວົ້າຕາມສຳນວນຂອງພວກດັຊ "ນະໂຍບາຍດ້ານສິນລະທັມ" ຫມາຍເຖິງ "ພາລະແບກຫາບຂອງຄົນ ຂາວ" ໄດ້ຕອບສະຫນອງເຫດຜົນອັນຫນ້າເຊື່ອຖື ສຳລັບການຈັດຕັ້ງຄືນໃຫມ ແລະບໍ່ພຽງແຕ່ເປັນປະຫານ ໃນກິດຈະການທາງການເມືອງເທິງເກາະດອນເທົ່ານັ້ນ. ຄວາມຫຍຸ້ງຍາກອັນແສນສາຫັດດ້ານງົບປະມານ ທີ່ກ່ຕົວຂຶ້ນ ໃນຊຸມປີ 1870 ທຸເລົ່າເບົາລົງ ຍ້ອນພາສີໃຫມ່ ເມື່ອທ້າຍສະຕະວັດ, ລາຍຮັບຂອງລັດຖະບານຫລາຍຂຶ້ນເປັນສອງຕໍ່ ໃນລະຫວ່າງປີ 1899 ແລະ 1912. ປັດໄຈອື່ນໆຍັງເປັນສິ່ງແປກປະຫລາດ ສຳລັບສະພາບການ ຢູ່ນອກຊະວາ. ບໍລິສັດເຄ.ພີ. ເອມ (Koninklijk Paketvaart Maatschapij) ລົງມືປະຕິບັດການໃນປີ1891 ເພື່ອຍຸຕິການຜູກຂາດເຕັມຕົວ ຂອງເຮືອສິ່ງສິນຄ້າທາງທະເລ ໂດຍເຮືອຈັກອາຍນ້ຳ ຂອງອັງກິດ ແລະເພື່ອຫລຸດທ່າອຽງນິຍົມສິ່ງສິນຄ້າ ຂອງຫມູ່ເກາະດອນຜ່ານອອກທາງ ສິງກະໂປ ຫລາຍກວ່າບັດຕາເວຽ. ໃນຖານະເປັນບໍລິສັດແລ່ນເຮືອ ເຄື່ອງທາງການ ບໍລິສັດຍັງໃຫ້ບໍລິການດ້ານການໄປສະນີ ແລະຂົນສົ່ງທະຫານໃຫ້ລັດຖະບານນຳ, ຖ້າຫາກຈຳເປັນກໍປະຕິບັດການ ແບບສ່ຽງຕໍ່ການຂາດທຶນຢູ່ໃນອ່ົງເຂດໃກ້ໆຊາຍຝັ່ງ. ຕາຫນ່າງເສັ້ນທາງແລ່ນເຮືອແລະການໃຫ້ບໍລິການທີ່ຫລາຍຂຶ້ນຂອງບໍລິສັດ ໄດ້ດຶງດູດເອົາຫມູ່ເກາະດອນ ພາຍໃຕ້ການຄວບຄຸມຂອງໂຮນລັງ ເຂົ້າມາຮວມກັນ ແບບບໍ່ເຄີຍມີມາກ່ອນ.

ໃນທີ່ສຸດ ສົງຄາມອາເຈ ກໍຍຸຕິລົງ ພາຍຫລັງປີ 1896, ກອງກຳລັງຂອງໂຮນລັງ ປັ້ນໄປຫາຍຸທະສາດໃຫມ່ອັນນຶ່ງ ຄືການໂຈມຕີ ແລະລາດຕະເວນລຽນຕິດ, ໃນທີ່ສຸດ ມາເຖິງປີ1902 ພວກອາເຈ ກໍຖືກຜາບລົງຢ່າງຣາບຄາບ, ຖ້າວ່າບໍ່ແມ່ນທາງກາຍະພາບທັງຫົມດ ກໍແມ່ນດ້ານຈິດໃຈ. ຜົນສະທ້ອນມີຫລາຍອັນຫລາຍແນວ. ໃນທີ່ສຸດ ການຮ່ວໄຫລດ້ານການເງິນກໍສ້ຽງສຸດລົງ ແລະກອງທະຫານ ກໍໄດ້ຮັບການປົດປ່ອຍໄປເຮັດວຽກບໍລິການຢູ່ບ່ອນອື່ນ. ຢູ່ໃນກອງບັນຊາການແຫ່ງກອງທັບນັ້ນເອງ ອາເຈ ໄດ້ຜະຫລິດຕົວແບບຕາມທຳນຽມເດີມ ຈາກຕົວທ່ານເຈົ້າແຂວງໃຫຍ່ເອງ ຄື ທ່ານ ເຈ. ບີ . ວັນ ເຮີດສ໌ (J.B.van Heutz 1904-1909) ຊຶ່ງເປັນຜູ້ພັດທະນາແລະນຳໃຊ້ນະໂຍບາຍໃໝ່ໃນລະບົບຈັກກະພັດ. ຟອງທະເລ "the mare chaussee" ແມ່ນກອງກຳລັງພິເສດ ທີ່ຕິດອາວຸດພຽງເລັກນ້ອຍ ແຕ່ເຄື່ອນໄຫວວ່ອງໄວເດັດດ່ຽວໃນການກວາດລ້າງການຕໍ່ຕ້ານ ຢູ່ອາເຈ ໄດ້ພິສູດວ່າ ມັນແມ່ນເຄື່ອງມື ທີ່ມີອຳນາດ ເພື່ອບັນລຸຜົນຮັບຢ່າງດຽວກັນຢູ່ບ່ອນອື່ນໆເທິງຫມູ່ເກາະດອນ.

ດ້ວຍການໂຈມຕີ ຢ່າງວ່ອງໄວເປັນໄລຍະ ຈຶ່ງເຮັດໃຫ້ ນິເກຣິ ທີ່ເຫລືອຢູ່ ແລະສັງຄົມທັງຫລາຍໃນເຂດ ວົງຮອບນອກເກົ່າຂອງ ບັດຕາເວຽ ຕົກຢູ່ພາຍໃຕ້ການປົກຄອງອັນມີປະສິດທິພາບ. ເມື່ອ ແວນ ຮູດສ໌ (Van Heutz) ອອກກິນເບ້ຽບຳນານ ຕາມກະສຽນອາຍຸ ໃນປີ 1909, ລັດຕ່າງໆ ແລະ ຫົວ

ເມືອງກວ່າ 200 ລັດ ຄ້າຍຄືກັນນີ້ ໄດ້ເຊັນສັນຍາທີ່ຊື່ວ່າ ຖະແຫລງການສັ້ນ (Short Declara- tion) ທີ່ນຳເຂົ້າມາໃຊ້ໃນປີ1898 ໃນນັ້ນ ໄດ້ເນັ້ນບອກແຕ່ພຽງວ່າ ພວກເຂົາຍອມຮັບການປົກຄອງ ຂອງໂຮນລັງ ແລະຈະຕ້ອງເຄົາຣົບລະບຽບທັງຫມົດຂອງໂຮນລັງ ກຽວກັບດິນແດນຂອງພວກເຂົາ. ໃນຊຸມ ປີດຽວກັນນັ້ນ ກົດຫມາຍກຳນົດອັດຕາຂອງໂຮນລັງ ປີ 1873 ເຊິ່ງແຕ່ເດີມໃຊ້ແຕ່ກັບຊະວາ ແລະເຂດປົກ ຄອງໂດຍກົງ ພາຍນອກເທົ່ານັ້ນ ກໍຖືກນຳໃຊ້ໃນທັນທີ ຢູ່ຫມູ່ເກາະດອນເກືອບທັງຫມົດ. ສະກຸນເງິນຕາຂອງ ໂຮນລັງ ໄດ້ຖືກນຳມາໃຊ້ແທນເງິນຫລຽນ ຫລາຍຊະນິດ ທີ່ຊົມໃຊ້ມາແຕ່ເດີມຢູ່ໃນເກາະດອນຕ່າງໆ ເຮັດໃຫ້ເກີດມີ ຄວາມເປັນເອກະພາບກັນ ເຊັ່ນດຽວກັບການໃຫ້ບໍລິການ ທີ່ເຄີຍແຜ່ອອກໄປໂດຍບໍລິສັດ ເຄພີເອມ(K.P.M ), ດັ່ງນັ້ນ ມາເຖິງປີ 1910 ຢູ່ວົງຮອບ ນອກຂອງຫມູ່ເກາະດອນ ແລະດອນຊະວາ ບໍລິສັດ ກຳເປນີ ຈຶ່ງໄດ້ ຕາຍດັບລົງ ແລະໄດ້ເກີດມີບໍລິສັດໃຫມ່ທີ່ຍິ່ງໃຫຍ່ ແລະຄ້າຍຄືກັນຂຶ້ນ ຫລາຍໆຂຶ້ນໆ ມາແທນ ຄື ບໍລິສັດ ອິນດີສ ເນເທີເລນ ຕາເວັນອອກ (Nertherlands East Indies).

## ມະລາຢູຂອງອັງກິດ

ໃນເດືອນມັງກອນ ປີ 1874, ພາຍຫຼັງການການອຸທອນຕໍ່ອັງກິດ ຂອງຣາຊາ ອັບດຸນລາ ນຶ່ງໃນ ບັນດາ ຜູ້ຍາດຊິງບັນລັງຂອງ ນິເກຣີ ມະລາຢູ ດ້ານຝັ່ງຕາເວັນຕົກ ຂອງດອນເປຣັກ (Perak) ຜູ້ຄົບສາມ ກຸ່ມນ້ອຍໆນີ້ ໄດ້ພົບກັນຢູ່ດອນປັງກໍ (Pangkor) ນອກຕາຝັ່ງເປຣັກ, ນຶ່ງໃນສາມກຸ່ມນັ້ນ ເປັນກຸ່ມຊາວ ມະລາຢູ ເຊິ່ງສ່ວນຫລາຍປະກອບດ້ວຍຖັນແຖວຫົວຫນ້າໃນລັດ ທີ່ມີຄວາມສຳຄັນກວ່າຈຳນວນນຶ່ງ ໂຮມ ທັ້ງ ອັບດຸນລາ ແຕ່ບໍ່ແມ່ນ ສຸນລະຕານອິດສະມາແອລ ແທ້ໆ ແລະກໍບໍ່ແມ່ນຜູ້ທີ່ ຍັງຢູ່ໃນຕຳແຫນ່ງ. ກຸ່ມທີສອງເປັນຊາວຈີນ ສ່ວນຫລາຍເປັນຫົວຫນ້າຂອງສອງສະມາຄົມລັບປ່ໍລະປັກ ແລະຕໍ່ສູ້ກັນມາ ເພື່ອ ຍຶດຄອງເຂດບໍ່ແຮ່ສັງກະສີ ໃນເມືອງ ລາຣູດທ໌ (Larut) ໃນດອນເປຣັກ. ກຸ່ມທີສາມແມ່ນພວກອັງກິດ ໂດຍມີ ຂ້າຫລວງແຕ່ງຕັ້ງຂຶ້ນໃຫມ່ເປັນຫົວຫນ້າຢູ່ໃນນິຄົມຕັ້ງໃຫມ່ເຂດປ່ອງແຄບ ເພິ່ນຜູ້ນີ້ ຊື່ວ່າ ພະຍາ ແອນດຣູ ຄລາກ (Sir Andrew Clake) ທີ່ຫາກໍມາເຖິງ ສິງກະໂປ ໄດ້ 2-3 ອາທິດກ່ອນ ພ້ອມດ້ວຍຄຳສັ່ງຈາກ ສຳນັກງານອານານິຄົມ ໃຫ້ສືບຖາມກ່ຽວກັບຄວາມຫຍຸ້ງຍາກທີ່ເກີດຂຶ້ນໃນນິເກຣີ ຝັ່ງຕາເວັນຕົກ ແລະສະ ເພາະແລ້ວ ໃຫ້ຖາມຕື່ມເຖິງຄວາມເປັນໄປໄດ້ທີ່ຈະຕັ້ງພະນັກງານອັງກິດ ປະຈຳຢູ່ໃນລັດໃດລັດນຶ່ງ. ດ້ວຍ ເວລາສັ້ນໆ ແລະດ້ວຍຄວາມສະດວກງ່າຍດາຍ ທ່ານຄລາກ ໄດ້ແລກປ່ຽນຄວາມຄຶດເຫັນກັບຊຸມຊົນ ພໍ່ຄ້າ ຢູ່ບ່ອນຫັ້ນ ເຊິ່ງກໍພວມຕ້ອງການໃຫ້ມີຜູ້ມາຂັດຈັງຫວະພໍດີ. ດ້ວຍຜູ້ໃດກໍບໍ່ຢາກເສຽເວລາ ໃນການເຮັດຂໍ້ ສະເຫນີໄປຫາ ກຸງລອນດອນ ທ່ານຈຶ່ງ ໄດ້ຈັດກອງປະຊຸມຂຶ້ນທີ່ ປັງກໍ ເພື່ອໃຫ້ອຽກສາມຢ່າງສຳເລັດລົງໄດ້ ຄື:

1/ ແກ້ບັນຫາເລື່ອງຜູ້ຈະຂຶ້ນຄອງ ລັດເປຣັກ ທີ່ຍັງຜິພາດກັນຢູ່ ນັ້ນໃຫ້ຫມົດໄປ ຢ່າງຣາບຄາບ ເຊິ່ງ ອາດຈະຕ້ອງເຂົ້າຂ້າງ ອັບດຸນລາ ແດ; 2/ ຍຸຕິການຕໍ່ສູ້ເອົ່ນຂ້າລະຫວ່າງ ກຳມະກອນຊາວຈີນ ແລະ 3/ ແຕ່ງຕັ້ງໃຫ້ພະນັກງານອັງກິດມີອຳນາດພຽງພໍ ເພື່ອນຳເອົາກົດລະບຽບມາສູ່ ນິເກຣີ ແລະເພື່ອຫລີກເວັ້ນ ການທຳລາຍທາງເສດຖະກິດ ດ້ວຍການຂຸດຄົ້ນຊັບພະຍາກອນທ້ອງຖິ່ນໂດຍຄົນຕ່າງດ້າວ.

ພາຍໃນນຶ່ງອາທິດເທົ່ານັ້ນ ກໍບັນລຸຈຸດມຸ່ງຫມາຍເຫລົ່ານີ້ໄດ້ ແລະພວກຫົວຫນ້າຊາວມະລາຢູ ທີ່ມາປະຊຸມກັນ ກໍພາກັນລົງນາມໃສ່ເອກະສານ ທີ່ຮູ້ຈັກກັນດີໃນນາມສັນຍາຜູກພັນ ປັງກໍ (Pangkor Engage-ment) ຕໍ່ຫນ້າ ຜູ້ວ່າການປົກຄອງລັດ, ໃນເອກະສານນັ້ນບັນຍັດວ່າ "ພວກຊົນຊັ້ນຂຸນນາງ ຈຶ່ງ ຍອມຮັບເອົາ ຣາຊາອັບດຸນລາ ເປັນ ສຸລະຕານ "ຜູ້ເຊິ່ງບຸກຄົນອື່ນ ຈະຕ້ອງຖາມບັນຫາທັງຫມົດ ກັບເພິ່ນ ແລະເຮັດນຳ ຄຳຊີ້ແນະຂອງເພິ່ນ ຍົກເວັ້ນແຕ່ເລື່ອງກຽວກັບທາງສາສະຫນາແລະປະເພນີ" ແລະອີກຂໍ້ນຶ່ງ

ເວົ້າວ່າ "ການທ້ອນໂຮມແລະການ ຄຸ້ມຄອງພາສີອາກອນທັງຫມົດ ແລະການບໍລິຫານຂອງລັດ ໃຫ້ດໍາ ເນີນໄປ ພາຍໃຕ້ຄໍາແນະນໍາ ຂອງຜູ້ສໍາເລັດລາຊະການປະຈໍາ.

ຂໍ້ຄວາມເສກສັນປັ້ນແຕ່ງ ແຊກຊ້ອນຢູ່ໃນເອກະສານ ໃນສະພາບການ ທີ່ເອກະສານໄດ້ຖືກເຊັນ ກັນແລ້ວນັ້ນ ຕໍ່ມາ ກໍຈະໄດ້ໃຫ້ສັດຕະຍາບັນ ເພື່ອເປັນຫຼັກການໃຫ້ອັງກິດ ຖືສິດຍຶດຄອງອໍານາດ ແລະ ສິດຫນ້າທີ່ ອັນມີຜົນ ໃນດ້ານປະຕິບັດການທັງຫມົດ ບໍ່ພຽງແຕ່ຢູ່ລັດເປຣັກ ເທົ່ານັ້ນ ແຕ່ຫາກໂຮມເຖິງ ເນກິຣີ ທີ່ເຫລືອຢູ່ໃນແຫລມ ມະລາຢູນໍາ. ຂໍ້ຄວາມທີ່ວ່າ: "ການໄຮ້ຄວາມສາມາດ ທີ່ຈະປົກຄອງຕົນເອງ ຂອງຊາວມະລາຢູ" ເປັນຂໍ້ຄວາມ ສໍາຄັນນຶ່ງ ຢູ່ໃນການຖົກຖຽງທີ່ສະເຫນີໄວ້ ເພື່ອຮັບປະກັນການລົງມືແຊກແຊງ (ເຖິງແມ່ນວ່າ ມັນຈະຫຍຸ້ງຍາກຫລາຍຂຶ້ນໆ ໃນການຮັກສາໄວ້ສໍາລັບຂັ້ນຕອນຫລັງໆ) ກໍໄດ້ຮັບ ການພິສູດຢ່າງຫນ້າພໍໃຈ ໂດຍຈົດຫມາຍຂອງ ອັບດຸນລາ ຫາ ທ່ານຄລາກ ໂດຍແມ່ນ ທ່ານຄລາກ ຄຶດ ອອກເອງ ແລະຂຽນຮ່າງ ທະນາຍຄວາມຄົນສິງກະໂປເປັນຄົນຂຽນຂຶ້ນ ເຊິ່ງໃຊ້ຄໍາວ່າ " ຄວາມແນະນໍາ ແລະ ຄວາມຊ່ອຍເຫລືອ" ຢູ່ໃນການບໍລິຫານລັດ. ສໍາລັບທ່ານ ອັບດຸລ ແນ່ນອນວ່າ ໄດ້ຍິນຍອມນໍາຈົດ ຫມາຍນັ້ນແລ້ວ ເຖິງແມ່ນວ່າ ເພິ່ນບໍ່ໄດ້ຂຽນເອງກໍຕາມ. ຄໍາຮ້ອງຂໍນັ້ນ ລາງເທື່ອອາດຈະເປັນພຽງ ຣິດຄອງຢ່າງນຶ່ງ ເຊິ່ງເປັນສ່ວນນຶ່ງຂອງຮູບແບບຕາມປະເພນີ ວ່າດ້ວຍການສະແຫວງຫາຄວາມຊ່ອຍ ເຫລືອ ຈາກມະຫາອໍານາດທີ່ແຂງແຮງກວ່າ ໃນລະຫວ່າງການດໍາເນີນການຊ່ວງເສັງ ເພື່ອຂຶ້ນຄອງຕໍາ ແຫນ່ງສືບຕໍ່. ເຖິງແມ່ນວ່າເປັນເລື່ອງຈິງຈັງ, ຢາກໃຫ້ຄໍາແນະນໍານັ້ນເພື່ອໃຫ້ບັນຫາອະນຸຍາດ ວ່າດ້ວຍ ການນໍາໃຊ້ສິດຫນ້າທີ່ສູນກາງ ອັນມີຜົນໃນເຊີງປະຕິບັດຢູ່ໃນ ນິເກຣິມະລາຢູ ໃນສະພາບຂອງຄວາມອຸດົມ ສົມບູນອັນກະຈັດກະຈາຍຂອງເມືອງ ກັບການອົບພະຍົບຢ່າງ ເປັນຂະບວນໃຫຍ່ ຂອງກໍາມະກອນບໍ່ແຮ ຊາວຈີນ ຜູ້ກໍາລັງຕໍ່ສູ້ກັນ ອາດກາຍເປັນເລື່ອງ"ຂັບໄລ່ຄົນຈີນ ໃຫ້ຫມົດໄປ" ໄດ້. ແຕ່ວ່າ ການຂັບໄລ່ຄົນຈີນ ແມ່ນສິ່ງສຸດທ້າຍທີ່ອັງກິດຈະເຮັດ ກົງກັນຂ້າມ ຂໍກຸນແຈທີ່ພາໄປເຖິງຄວາມເຂົ້າໃຈໃດໆໃນຂໍ້ຕົກລົງທີ່ ປັ່ງກໍ ລະຫວ່າງສອງກຸ່ມໃຫຍ່ຄື ພະນັກງານຂອງອັງກິດ ກັບຊົນຊັ້ນປົກຄອງຊາວ ມະລາຢູ ຊໍ້າຖືກສະຫນອງ ໃຫ້ໂດຍກຸ່ມມິດງຽບທີສາມ ຄືກຸ່ມກໍາມະກອນ ບໍ່ແຮ ແລະຊາວຄ້າຂາຍຈີນ. ເລື່ອງເລົ່າຕໍ່ໆກັນດັ່ງນັ້ນ ຈຶ່ງ ປາກົດນິທານພື້ນສືບວ່າດ້ວຍການປາກົດຕົວຂອງອັງກິດວ່າ: ການແຂ້ງແຊກແຊງ ໄດ້ດໍາເນີນການເພື່ອຜົນ ປະໂຫຍດຂອງຊາວມະລາຢູເອງ ເຊິ່ງຜົນປະໂຫຍດນັ້ນ ມີຜູ້ເວົ້າວ່າ ໂດຍທາດແທ້ແລ້ວ ຍັງຄົງຈະຍິ່ງໃຫຍ່ ມະຫາສານຢູ.

ຖ້າເລື່ອງນີ້ ເປັນນະວະນິຍາຍເລື່ອງທໍາອິດ ແລະຍິ່ງໃຫຍ່ທີ່ສຸດ ໃນຂະບວນການປະດິດສ້າງ ທີ່ຮູ້ກັນໃນນາມ "ມະລາຢູຂອງອັງກິດ" ແລ້ວ ກໍມີນະວະນິຍາຍສັ້ນໆກວ່າຊຸດນຶ່ງເກີດນໍາມາອີກ. ໃນລັດ ເປຣັກ ແລະຕໍ່ມາໃນລັດເຊລັງກໍ, ນິເກຣິ ເຊມບິລັນ ແລະ ປາຫັງ (Selangor, Negri,Sembilan and Pahang) ນະວະນິຍາຍກ່ຽວກັບ"ຄໍາແນະນໍາ" ຂອງຜູ້ສໍາເລັດລາຊະການ ບໍ່ປະສົບຄວາມສໍາເລັດ ໃນການ ປົກອໍາຄວາມຈິງທີ່ວ່າ ຜູ້ເຮັດຫນ້າທີ່ປົກຄອງແທ້ໆ ແມ່ນຜູ້ສໍາເລັດລາຊະການ ກັບພວກອາຍາສິດອັງກິດ ຟຸ້ນ ສ່ວນ ສຸນລະຕານ ກັບພວກເຈົ້ານາຍຂອງເພິ່ນ ເປັນຜູ້ໃຫ້ຄໍາແນະນໍາ ແລະຊ່ອຍເປັນບາງຄັ້ງຄາວ. ເມື່ອສະຫະພັນລັດທັງສີ່ ຖືກຊຸກຍູ້ໃຫ້ອອກ ໃນປີ 1895 ນັ້ນ ມັນບໍ່ແມ່ນເພື່ອຜົນປະໂຫຍດຂອງຊາວມະລາຢູ ແຕ່ແມ່ນເພື່ອ ຄວາມສະດວກໃນການປົກຄອງຂອງອັງກິດ, ໄດ້ມີການຮັບປະກັນກັບ ສຸນລະຕານປະຈໍາລັດ ວ່າ ໃນການລົງລາຍເຊັນໃສ່ສັນຍາໃຫມ່ນັ້ນ ຢູ່ໃນລະດັບເບົາບາງທີ່ສຸດ ພວກເພິ່ນອາດຈະບໍ່ຖືກຕັດຮອນສິດ ໃນການປົກຄອງຕົນເອງ ເຊິ່ງມີຢູ່ແລ້ວໃນປັດຈຸບັນ. ແນ່ນອນ ຄົນຜູ້ຈອງຫອງອາດຈະສັງເກດໄດ້ວ່າ ຄໍາ ເວົ້າເຫລົ່ານີ້ ບັນຍາຍສະຖານະການໄດ້ຢ່າງຖືກຕ້ອງ. ຍັງຕໍ່ມາອີກຮອດປີ 1909 ເມື່ອສະພາສະຫະພັນລັດ ໄດ້ຮັບການສ້າງຕັ້ງຂຶ້ນມາໃນຖານະອົງການນິຕິບັນຍັດເຫນືອລັດ ໂດຍທົ່ວໄປກໍເພື່ອຜົນປະໂຫຍດຂອງຊົນ ຊັ້ນຮັ່ງມີ ພໍ່ຄ້າຢ່າງ ຊາວເອີຣົບ ແລະເພື່ອກໍານົດຂອບເຂດສິດຫນ້າທີ່ຂອງ ຜູ້ວ່າ ລາຊະການໃຫຍ່ ຂອງ ສະຫະພັນລັດ, ຂໍ້ຖົກຖຽງມີຢູ່ວ່າ ສະພານິຕິບັນຍັດ ຄວນຈະໄດ້ມອບສິດຫນ້າທີ່ບາງຢ່າງ ໃຫ້ແກ່ ສຸນລະ

ຕານ, ສິດຫນ້າທີ່ ທີ່ສູນເສຽໄປ ເມື່ອຄາວຈັດຕັ້ງສະຫະພັນລັດ. ແຕ່ພວກສຸນລະຕານ ພຽງແຕ່ໄດ້ນັ່ງຕັ່ງອີ້ ໃນຖານະສະມາຊິກທໍາມະດາ ຟັງການປະຊຸມທີ່ດໍາເນີນໄປ ໃນພາສາທີ່ຕົນເອງຟັງບໍ່ ເຂົ້າໃຈ.

ຊົນຊັ້ນປົກຄອງຊາວມະລາຢູ ໃນສະຫະພັນລັດ ຍອມຮັບການການຄວບຄຸມທີ່ແຜ່ລາມບໍ່ຢຸດຢັ້ງ ຂອງອັງກິດ ໃຫ້ຢູ່ເຫນືອກິດຈະການຂອງຕົນມາຕັ້ງແຕ່ປີ 1874 ແລ້ວ ຍ້ອນເຫດຜົນຫລາຍອັນຫລາຍແນວ. ອັນທໍາອິດ ແມ່ນການເຂົ້າໄປແຊກແຊງລະຍະຕົ້ນໆ ເຊິ່ງຜູ້ທີ່ຂະບົດໄດ້ຖືກປາບລົງດ້ວຍກໍາລັງ ເຊັ່ນ ຢູ່ໃນ ລັດເປຣັກ ປີ 1875 ແລະຢູ່ ລັດປາຫັງ ໃນຊຸມຕົ້ນປີ 1890. ໃນທ່າມກາງບັນຍາກາດແຫ່ງການຍອມຮັບ ທີ່ເກີດຕໍ່ມານັ້ນ ເຮັດໃຫ້ມີການຍຸຕິໄດ້ໃນເລື່ອງທີ່ວ່າ ຜູ້ໃດຄວນຈະໄດ້ຮັບໃນສິ່ງທີ່ຕົນຄວນໄດ້ ເຊັ່ນວ່າ ເບ້ຽ ບໍານານ ຈາກການເຄື່ອນໄຫວການເມືອງ ອັນພໍດ້ວມພໍດີກັບລາຍຮັບໃນເມື່ອກ່ອນ ຈາກພາສີແລະ ຄ່າທໍາ ນຽມ, ຕໍາແຫນ່ງນ້ອຍລົງມາຢູ່ໃນການບໍລິຫານ ເຊັ່ນເປັນ "ຜູ້ອໍານວຍການສູງສຸດຂອງ ແປງກູລູສ" (penghulus) ຫລື ມີຕັ່ງນັ່ງ ໃນສະພາຂັ້ນຕົ້ນແຫ່ງລັດ, ສະມັດຊາມິຕິບັນຍັດ ທີ່ໄດ້ຮັບການແຕ່ງຕັ້ງ ຂອງ ແຕ່ລະລັດ ແລະອົງການທີ່ເປີກສາຂອງຜູ້ວ່າລາຊະການ. ສໍາລັບ ສຸນລະຕານອົງນຶ່ງ ການຍອມຮັບ ການ ປົກຄອງຂອງອັງກິດ ຫມາຍເຖິງການມີລາຍຮັບສໍາຄັນຕາມບັນຊີຈໍານວນຜົນລະເຮືອນ, ລາຊະວັງແຫ່ງ ໃຫມ່ທີ່ສວຍງາມວິຈິດກວ່າເກົ່າ ພ້ອມດ້ວຍອົງປະກອບທີ່ຫນ້າພາກພູມໃຈອື່ນໆ ແລະບາງທີ ອາດຈະສໍາ ຄັນກວ່າຫມູ ກໍແມ່ນການສະແດງຄວາມເຄົາຣົບ ແລະການຮັບຮູ້ຖານະຕໍາແຫນ່ງ ໃນນາມຫົວຫນ້າລັດ ໄດ້ຊົມໃຊ້ສິດຫນ້າທີ່ ຢ່າງແທ້ຈິງໃນສັງຄົມຊາວມາລະຢູ ເຊິ່ງໃນເມື່ອກ່ອນ ເປັນແຕ່ພຽງ "ຄໍາ ເວົ້າລ້າໆ". ສິ່ງທີ່ລະບົບລັດອາຮັກຂາ ປົກປ້ອງຍິ່ງກວ່າຫມູ ກໍແມ່ນຮູບໂສມແລະ ໂຄງສ້າງຂອງສັງ ຄົມຕາມປະເພນີ ຕັ້ງແຕ່ຈອມສູງສຸດລົງມາ.

ສິ່ງຄ້າຍຄືກັນທັງຫມົດນີ້ ພວມເກີດຂຶ້ນຢູ່ໃນ ຊຽງຕຸງ, ບັນຈາມາສິນ ແລະອົງເຂດອື່ນໆອີກ ສິບ ກວ່າບ່ອນ ທີ່ມີປະຊາກອນກະຈັດກະຈາຍຢູ່ໃນພາກພື້ນອາຊີອາຄະເນໃນຍຸກນີ້. ສິ່ງທີ່ເຮັດໃຫ້ ໂດດເດັ່ນ ແລະມີຄວາມຫມາຍຕັດສິນຊາຕາກໍາ ກໍແມ່ນການພັດທະນາສັງຄົມໃຫມ່ອັນແປກຕ່າງແບບນຶ່ງ ສ້າງແຕ່ງ ຂຶ້ນໂດຍ ພວກນັກທຸລະກິດຮັບເຫມົາຈີນແລະອັງກິດ ແລະໃຫ້ໄປຄຽງຄູ່ກັບສັງຄົມຕາມປະເພນີ ມະລາຢູ ຢູ່ໃນອົງເຂດຊາຍຝັ່ງຕາເວັນຕົກຂອງມະລາຢູ, ຜົນການສໍາຫລວດປະຊາກອນ ສອງທົດສະວັດ ກ່ອນ 1901 ຊີ້ໃຫ້ເຫັນການເພີ່ມຂຶ້ນຂອງພົນລະເມືອງປະສົມຢູ່ ເປຣັກ ແລະ ເຊລັງກໍ ແຫ່ງດຽວຈາກ ປະມານ 130,000 ເປັນ ເກືອບ 600,000 ຄົນ, ໃນນີ້ ສ່ວນຫລວງຫລາຍ ແມ່ນຄົນຕ່າງດ້າວ ຊາວຈີນ ອົບພະຍົບ, ເຖິງແມ່ນ ວ່າຂະບວນການນັ້ນ ຈະຄືກັນກັບຮູບແບບແຫ່ງການພັດທະນາ ທີ່ມີຢູ່ກ່ອນປີ 1874 ເຊິ່ງຄວາມຈິງ ມີສ່ວນ ຊ່ວຍໃຫ້ອັງກິດ ໄດ້ເຂົ້າມາແຊກແຊງຫລາຍ, ການປ່ຽນແປງທາງດ້ານປະຊາກອນ ທີ່ເກີດຂຶ້ນນັ້ນ ກໍ່ໃຫ້ເກີດ ນະວັດຕະກໍາຫລາຍຊະນິດ ຫລາຍກວ່າເລື່ອງລະດັບຂອງຄຸນນະພາບ. ການອົບພະຍົບເຂົ້າມາ ຂອງຜູ້ຄົນ ເກີດຂຶ້ນພ້ອມໆ ກັບການຕີບໃຫຍ່ຢ່າງວ່ອງໄວຂອງເສດຖະກິດສິ່ງອອກ, ມູນຄ່າການ ສິ່ງອອກ ເຊິ່ງສ່ວນ ຫລາຍແມ່ນ ແຮ່ກົ່ວ ຈາກລັດໃນອາຮັກຂາທັງຫລາຍ ສູງຂຶ້ນຢ່າງຫນ້ອຍກວ່າ ເຄິ່ງລ້ານໂດລາຮ່ອງແຄບ (Strait dollars) ໃນປີ 1875 ເປັນຫລາຍກວ່າ 60 ລ້ານ ໃນປີ 1900. ເຫດການນີ້ ເຮັດໃຫ້ເກີດຄວາມ ຕ້ອງການ ແລະຄິດຄວັກໃຫ້ມີການສ້າງທາງລົດໄຟ ຖະຫນົນ ແລະການຄົມມະນາຄົມອື່ນໆ ເຊິ່ງແຊກຊຶມ ເຂົ້າໄປໃນດິນແດນດ້ານຕາເວັນຕົກຂອງແຫລມມະລາຢູ ແລະໄດ້ເຊື່ອມຕິດລັດຕ່າງໆເຂົ້າກັນ ແບບທີ່ບໍ່ສາ ມາດເປັນໄດ້ໃນເມື່ອກ່ອນ. ໃນທີ່ສຸດ ການກໍ່ຕັ້ງລະບົບບໍລິຫານແບບເອີຣົບ ຢ່າງດຽວ ສໍາລັບລັດມະລາຢູຫັງ ຫລາຍ ແລະນິຄົມຮ່ອງແຄບ ໃຫ້ເປັນເອກະພົບນຶ່ງ ທີ່ມີຫລາຍສິ່ງຫລາຍ ຢ່າງສັບຊ້ອນກັນ ເຊັ່ນການສຶກສາ ສາທາລະນະ, ການຂຶ້ນທະບຽນຕາດິນ ແລະອົງການຈັດຕັ້ງ ດ້ານພາສີອາກອນ. ການປ່ຽນແປງ ສ່ວນ ຫລາຍ ມີຜົນກະທົບດ້ານເລັກນ້ອຍຕໍ່ຊົນຊັ້ນຊາວນາຫລືພວກເຊື່ອເຈົ້າ ເຖິງ ຈະເປັນຄວາມຈິງທີ່ວ່າ ພວກ ມະລາຢູ ກອບໂກຍຜົນປະໂຫຍດອັນບັງເອີນຈາກທັງ ແພກສ໌ ບຣິຕານິກກາ (Pax Britannica) ແລະ ຈາກລະດັບຄວາມຢູ່ດີກິນດີທີ່ທະວີສູງຂຶ້ນ.

ລະຫວ່າງປີ 1909 ແລະ 1914 ການຄວບຄຸມຂອງອັງກິດ ເໜືອສ່ວນທີ່ເຫລືອຂອງ ນິເກຣີມະລາ ຢູ່ໃນກິ່ວດອນ (ຍົກເວັ້ນອານາເຂດພາກເໜືອ ເຊິ່ງຍັງຄົງຖືກປົກຄອງໃນຖານະເປັນແຂວງນຶ່ງ ຂອງ ສະຫຍາມ) ກໍບັນລຸສະພາບສົມບູນດ້ວຍການຍຶດເອົາໄດ້ທັງ ເກດະ, ເປີລິສ, ກະລັນຕັນ ແລະ ຕຣັງການູ ດ້ານທິດເໜືອ ແລະ ລັດຍະໂຮເຣະ ທາງທິດໃຕ້. ໃນເວລາຕໍ່ມາ ລັດເຫລົ່ານັ້ນທັງຫມົດກໍຍອມຮັບ" ທີ່ ເປີກສາຕາມຮູບແບບຂອງຜູ້ສຳເລັດລາຊະການແຫ່ງສະຫະພັນລັດ ແຕ່ກໍມີການຫລຸດຜ່ອນອຳນາດລົງ ແຕ່ ເລັກນ້ອຍ (ອັນສ່ອງແສງເຖິງກຳລັງຂອງຊົນຊັ້ນປົກຄອງຢູ່ ເກດະ ແລະ ຍະໂຮເຣະ ແລະ ຄວາມບໍ່ຫນ້າ ສົນໃຈ ຂອງລັດກະລັນຕັນ ກັບ ຕຣັງການູ ຕໍ່ເສດຖະກິດການສົ່ງອອກ) ໂດຍປ່ອຍໃຫ້ການມີສ່ວນຮ່ວມ ຂອງ ມະລາຢູ ຢູ່ໃນການປົກຄອງລັດຂອງຕົນເອງຢ່າງປອດໃສ ຊໍ່າໃດຊໍ່ານຶ່ງ. ລັດເຫລົ່ານີ້ເປັນທີ່ຮູ້ກັນ ໃນນາມ ອະສະຫະພັນລັດ ເພາະພາກັນຕໍ່ຕ້ານການຈອບອອຍທຸກແບບ ໃນເຂົ້າຮ່ວມສະຫະພັນ. ຢ່າງໃດກໍດີ, ໃນຄວາມຫມາຍສຳຄັນນຶ່ງ ກິ່ວດອນມະລາຢູ ຫລື "ມະລາຢູອັງກິດ" ໄດ້ກໍ່ຕົວຂຶ້ນເປັນເອກະພາບ ພາຍ ຫລັງປີ 1917 ໂດຍມີການຄວບຄຸມ ທາງ ການເມືອງຂອງອັງກິດ ຜູກມັດໄວ້.

## ດອນບໍນຽວ ຂອງ ອັງກິດ

ໃນລະຫວ່າງດຽວກັນກັບທີ່ອັງກິດ ຂະຫຍາຍການຄວບຄຸມ ອອກໄປໃນກິ່ວດອນ ມະລາຢູ ກໍໄດ້ມີ ການເຄື່ອນໄຫວຄ້າຍຄຶດຽວກັນຢູ່ ດອນບໍນຽວ ກ້ຳເໜືອ, ເປັນການເຄື່ອນໄຫວທີ່ບໍ່ແມ່ນຂອງ ອັງກິດ ທັງຫມົດ ແຕ່ຫາກທ້າຍທີ່ສຸດ ກໍຕົກມາຢູ່ພາຍໃຕ້ການອຸປະຖຳຂອງອັງກິດ. ເມື່ອມາຮອດຊຸມປີ 1840 ພວກລັດນຳຫນ້າ ໃນເຂດຊາຍຝັ່ງເບື້ອງນັ້ນ ຄື ບຣູນາຍ ກໍໄດ້ມອບເມືອງ ຊາຣາວັກ ໃຫ້ແກ່ "ຣາຊາ "ເຈມສ໌ ບຣູກ (James Brooke) ນັກສຽງໂຊກຄົນອັງກິດ ເປັນການຕອບແທນ ທີ່ເຂົາໄດ້ຊ່ວຍພາບຂະບົດ ດາຢັກ ເຊິ່ງຕໍ່ສູ້ກັບຊາວ ມະລາຢູບຣູນາຍ ຜູ້ຈອງຫອງ. 30 ປີ ຕໍ່ມາ ບຣູກ ກໍໄດ້ກືນເອົາດິນຕ່ອນອື່ນໆ ຂອງອານາເຂດ ບຣູນາຍ ໂດຍຫຍັບຍ້າຍແຕ່ເໜືອລົງມາຫາເຂດຊາຍຝັ່ງ ແລະ ເຂົາກໍໄດ້ພະຍາຍາມ ຂໍໃຫ້ອານາເຂດຂອງເຂົາ ໄດ້ເຂົ້າເປັນລັດໃນອາຣັກຂາຂອງອັງກິດ ຢ່າງເປັນທາງການແຕ່ຫາກໄຮ້ຜົນ. ຫລານຊາຍຊື່ ຊາກເລີສ໌ ບຣູກ ຜູ້ສືບທອດເຂົາຕໍ່ມາໃນປີ 1868, ໃນຂັ້ນຕົ້ນ ກໍບໍ່ປະສົບຄວາມ ສຳເລັດຄືກັນ ໃນເລື່ອງຄວາມພະຍາຍາມອັນສຸດທ້າຍນີ້. ດ້ວຍຄວາມບຸກບືນສຸດຂີດ ເພື່ອປັບປຸງອະນາຄົດການຄ້າຂອງ ຊາຣາວັກ ແລະເພື່ອສືບຕໍ່ຂະຫຍາຍການຄອບຄອງຂອງຕົນອອກໄປ ແບບໃຫ້ ບຣູນາຍ ເປັນຝ່າຍເສຽຫາຍ, ບຣູກຈຶ່ງພະຍາຍາມຍົ້ວຍວາຍ ອັງກິດໃຫ້ສະຫນັບສະຫນຸນການກືນກິນລັດ ສຸນລະຕານ ຂອງ ຕົນເອງ. ເມື່ອເກີດໂຫໂສຂຶ້ນຍ້ອນຄວາມຊູຊີໃນຂອງເຂົາ, ທາງຫ້ອງການຕ່າງປະເທດຂອງອັງກິດ ຈຶ່ງປະຕິເສດທີ່ຈະ ສະຫນັບສະຫນຸນ ໂດຍສືບຕໍ່ເນັ້ນເຖິງ ບູລະນະພາບ ແຫ່ງບຣູນາຍ.

ໃນຂະນະດຽວກັນ ທ່ານສຸນລະຕານ ແຫ່ງ ສູລູ ເຊິ່ງເຈັບແສບ ເນື່ອງຈາກການຫລຸລັ່ງທັ່ງເທ ເຂົ້າ ມາຢ່າງບໍ່ຢຸດເຊົາເປັນຂອງສະເປນ ກັບຄົນເອີຣົບຊາດອື່ນໆ ແລະຈາກການຕົກຕ່ຳຂອງຜົນກຳໄລ ຈາກ ພາກສ່ວນທຸລະກິດທາງເຮືອແລະການຄ້າຂາຍອັນຫລົ້ມແຫລວຢູ່ ບໍນຽວ ຂອງເພິ່ນ, ຈຶ່ງໄຂຊ່ອງທາງໃຫ້ ແກ່ການຍຸແຍ່ຄືກັນກັບ ສຸນລະຕານແຫ່ງບຣູນາຍ ເຄີຍເປັນມາແລ້ວໃນເມື່ອກ່ອນ ຄັ້ງເຈລະຈາກັບ ເຈມສ໌ ບຣູກ. ໃນປີ 1865 ສຸນລະຕານແຫ່ງສູລູ ໄດ້ກ້າວລ່ວງເຂົ້າສູ່ການເຮັດສັນຍາຜູກພັນຊຸດທຳອິດ ອັນເຮັດໃຫ້ ເພິ່ນໄດ້ຕົກລົງໃຫ້ເຊົ່າຂາຍຍົກໃຫ້ ຫລືບໍ່ ກໍໂອນສ່ວນທີ່ເພິ່ນອ້າງກຳມະສິດຢູ່ກ້ຳເໜືອຂອງບໍນຽວ ໃຫ້ແກ່ ພວກນັກທຸລະກິດຮັບເໝົາຊາວຕາເວັນຕົກ. ຮູບແບບຂອງການແລກປ່ຽນຄ້າຂາຍຢ່າງນີ້ ເຄີຍເປັນຈຸດລະ ເບີດ ແຫ່ງການຖົກຖຽງລະຫວ່າງຊາດມາແລ້ວ ໃນຫວ່າງບໍ່ເທົ່າໃດປີມານີ້, ແຕ່ຄວາມສົນໃຈ ຂ້າມເຂດ ຂອງສຸນລະຕານຕະຫລອດມາແມ່ນຄຳຫມັ້ນສັນຍາເລື່ອງການຈ່າຍເງິນປະຈຳປີສຳລັບທົດແທນ ສິ່ງທີ່ບັດນີ້ ສຳລັບ ອົງສຸນລະຕານ ເປັນພາລະກິດທີ່ຫມົດຫວັງແລ້ວ. ບັນດາເພື່ອນຮ່ວມງານຊາວ ຕາເວັນຕົກຂອງ

ທ່ານ ເຊັ່ນ ຄົນອາເມລິກາ, ກົງສູນອອສໂຕຣ ຮັງກາເຣຢ ຄົນນຶ່ງ ແລະຄົນອັງກິດຜູ້ນຶ່ງ ໄດ້ລຽນແຖວກັນ ເຂົ້າມາສືບທອດຕາມລຳດັບ ແຕ່ມາເຖິງປີ 1881 ສະພາບການກໍທຸ່ນທ່ຽງຂຶ້ນ. ລັດຖະບານອັງກິດ ໄດ້ອະນຸມັດລາຊະບັນຍັດສະບັບນຶ່ງ ສຳລັບບໍລິສັດບໍນຣໍອພາກເໜືອ ທີ່ກໍ່ຕັ້ງຂຶ້ນຢ່າງໃໝ່ອຽມ ເພື່ອຂຸດຄົ້ນພາກເໜືອຂອງບໍນຣໍອ ເຊິ່ງບັດນີ້ ຮູ້ຈັກກັນໃນນາມ ສາບາ (Sabah) ພາຍໃຕ້ບາງເງື່ອນໄຂ ໃນນັ້ນ ໂຮມທັງການຄຸ້ມຄອງຄວາມ ສຳພັນກັບຕ່າງປະເທດຂອງອັງກິດ.

ການອະນຸມັດລາຊະບັນຍັດ ເຮັດໃຫ້ລັດຖະບານອັງກິດ ມີຄວາມຫຍຸ້ງຍາກ ໃນການທີ່ຈະສືບຕໍ່ຍັດ ຂວາງການຍຶດຄອງດິນແດນໂດຍ ສາຣາວັກ ແຕ່ຄວາມເປັນປໍລະປັກທີ່ຮຸນແຮງຂຶ້ນລະຫວ່າງ ບຣູກ ກັບ ບໍລິສັດ ໃນເລື່ອງດິນແດນສ່ວນເໜືອ ຂອງບຣູນາຍ ກໍເປັນສິ່ງນາບຂູ່ການຫລົ້ມສະຫລາຍ ຂອງລະບົບ ສຸນລະຕານ ແລະແລ້ວໃນທີ່ສຸດ ມາຮອດປີ 1888 ໄວທ໌ຮອລ (Whitehall) ກໍໄດ້ຂະຫຍາຍການອາຮັກຂາ ຢ່າງເປັນທາງການຂອງອັງກິດ ອອກໄປສູ່ຫ້ວງສາມລັດ. ເຖິງແມ່ນວ່າ ການຜັງເຈື່ອນດິນແດນ ຂອງ ບຣູນາຍ ທັງກ້ຳເໜືອ ແລະກ້ຳໃຕ້ ຍັງສືບຕໍ່ດຳເນີນໄປ ໃນທີ່ສຸດ ມັນກໍໄດ້ຍຸຕິລົງໃນປີ 1906 ເມື່ອ ສຸນລະຕານ ຍອມຮັບຜູ້ວ່າລາຊະການອັງກິດ ຕາມຮູບແບບທີ່ເຄີຍສະຖາປະນາມາແລ້ວ ຢູ່ໃນລັດກົ່ວດອນ ຫ້ວງຫລາຍ.

ນັບແຕ່ນັ້ນເປັນຕົ້ນມາ ເຖິງແມ່ນວ່າ ອານາເຂດຫ້ວງສາມແຫ່ງໃນບໍນຣໍ ຈະຖືກປົກຄອງໂດຍ ແຍກຈາກກັນ ແຕ່ລັດຫ້ວງສາມຍັງຄົງຜູກພັນກັນໃນລະດັບໃດນຶ່ງຢູ່ໃນຂັ້ນສູງ ໂດຍທ່ານເຈົ້າແຂວງ ຂອງນິຄົມຮ່ອງແຄບ ຜູ້ຮັບຕຳແໜ່ງຊ້ຳຫລວງໃຫຍ່ສຳລັບບໍນຣໍ ແລະຫ້ວງສຳລັບລັດມະລາຢູຫ້ວງຫລາຍນຳອີກ. ເຖິງຢ່າງໃດກໍດີ ການຄຸ້ມຄອງການບໍລິຫານຢູ່ ບໍນຣໍ ບໍ່ໄດ້ເຂັ້ມງວດເທົ່າກັບຢູ່ເທິງກົ່ວດອນມະລາຢູ ແລະ ລັດສາບາ ກັບ ສາຣາວັກ ໂດຍສະເພາະແລ້ວ ກໍໄດ້ຜັດທະນາໄປຕາມເສັ້ນທາງຕ່າງກັນແດ. ທ່ານເຈົ້າ ແຂວງແຫ່ງບໍນຣໍ ປົກຄອງໂດຍບໍ່ມີໃຜຂວາງທາງ ຍົກເວັ້ນສະພາທີ່ເປີກສານ້ອຍໆສະພານຶ່ງ ທີ່ມີພະນັກ ງານຢູ່ຫ້າຄົນ, ຊາວສວນຄົນເອີຣົບຜູ້ນຶ່ງ ແລະຄົນຈີນຜູ້ນຶ່ງ (ຕໍ່ມາ ເປັນສະພານິຕິບັນຍັດ ແຕ່ງຕັ້ງທັງ ໝົດ). ຢູ່ ສາຣາວັກ, ບຣູກ ຜູ້ເຊິ່ງພາກພູມໃຈໃນຕົນເອງ ໃນເລື່ອງຫລັກການປົກຄອງອັນສ່ອງໃສ ຂອງ ຕົນນັ້ນ ໃນຕົວຈິງກໍໄດ້ເຮັດອັນໃດ ອັນນຶ່ງເພື່ອຫັນເຫເອົາປະຊາຊົນ ເຂົ້າມາຮ່ວມເປີກສາຫາລື ໂດຍຜ່ານ ສະພານິເທດ (ຢ່າງໃດກໍດີ, ສະມາຊິກ ຊາວສາຣາວັກ ສ່ວນໃຫຍ່ ເປັນຄົນມາເລ ທີ່ເປັນຊຸມຊົນກຸ່ມນ້ອຍ ສຸດຢູ່ໃນລັດ) ແລະສະພາກາງເຊິ່ງບໍ່ຈັດປະຊຸມເລື້ອຍເທົ່າໃດນັ້ນ ກໍມີບັນດາຫົວໜ້າຊາວດາຢັກ ກ້ຳເໜືອ ແມ່ນ້ຳ ມາຮ່ວມນຳຄືກັນ. ລັດທັງສອງ ມີລັກສະນະສະເພາະຢູ່ບ່ອນຊະນິດຮູບແບບປົຕານິຍົມ ທີ່ບໍ່ຣີບ ຮ້ອນຢາກເຫັນລູກຫລານຂອງຕົນເຕີບໃຫຍ່.

## ໝູ່ເກາະດອນ ຟີລິບປິນ

ໃນລະຫວ່າງຊຸມທົດສະວັດດຽວກັນນີ້ ການຜັດທະນາຢູ່ໃນ ຟີລິບປິນກໍເປັນໄປໃນທິດທາງແຕກຕ່າງ ໄປແດ. ມາເຖິງປີ 1870 ດອນລູຊອນ ແລະ ບິສາຍະ ຖືກປົກຄອງ ໃນຖານະເປັນອານານິຄົມ ຂອງສະເປນ ມາເປັນສາມສະຕະວັດແລ້ວ. ແຕ່ ຢູ່ໃນເອີຣົບ, ສະເປນ ຢູ່ໃນພາວະເສື່ອມສະຫລາຍ ແລະ ເສດຖະກິດ ຂອງ ຟີລິບປິນ ກໍຕົກຢູ່ໃນກຳມືຂອງອັງກິດ ແລະຈີນ. ໝູ່ເກາະດອນຕ່າງໆ ເປັນທີ່ດຶງດູດໃຈ ສຳລັບມະຫາ ອຳນາດຈັກກະພັດ ທີ່ພວມຮຸ່ງເຮືອງ ເຊັ່ນເຢຣູຊະລັມ ຍີ່ປຸ່ນ ແລະສະຫະລັດອາເມລິກາ. ຍິ່ງໄປກວ່ານີ້ ສັງຄົມຟີລິບປິນ ໃນຂະນະນັ້ນ ກຳລັງຢູ່ພາຍໃຕ້ການປ່ຽນແປງອັນວ່ອງໄວ ແບບທີ່ບໍ່ເຄີຍຮູ້ ເຫັນຢູ່ບ່ອນໃດ ມາກ່ອນ ໃນພາກພື້ນອາຊີອາຄະເນ ຈົນຮອດຕອນຕົ້ນໆຂອງສະຕະວັດທີ 20, ອັນມີຄວາມຫມາຍວ່າ ການ ປົກຄອງຂອງສະເປນ ຖືກນາບຂູ່ຢູ່ພາຍໃນ ດ້ວຍການປະຕິວັດອຽງຊາດນິຍົມ ໃນອະນາຄົດ. ໃກ້ໆຈະຫມົດ ສະຕະວັດ ອັນຕະລາຍທັງສອງກໍເກີດເປັນຈິງຂຶ້ນມາ. ໃນປີ 1896 ການປະຕິວັດລະເບີດຂຶ້ນ ແລະອີກ

ສອງປີຕໍ່ມາ ສະຫະລັດອາເມລິກາກໍໄດ້ ລົງສູ່ສະໜາມຮົບສູ້ກັບສະເປນ, ສ້າງຄວາມປະລາໄຊ ໃຫ້ກອງ ກຳລັງສະເປນຢູ່ມະນີລາ ແລະບັງຄັບໃຫ້ສະເປນ ຍົກຟີລິບປິນໃຫ້ ໂດຍແລກປ່ຽນກັບເງິນ 20 ລ້ານໂດລາ.

ຢ່າງໃດກໍດີ ເບິ່ງໃນດ້ານອື່ນໆແລ້ວ ການຜັດທະນາຢູ່ ຟີລິບປິນ ກໍຫາກຄ້າຍຄືກັບການຜັດທະນາ ຢູ່ບ່ອນອື່ນ ໃນພາກພື້ນອາຊີຕາເວັນອອກສຽງໃຕ້ຢູ່. ການຈັດຕັ້ງຄືນໃໝ່ຢູ່ພາຍໃນ ລຸນຫລັງ ປີ 1870 ດຳ ເນີນການໄປໄດ້ຫລາຍ ເທົ່າໆກັນກັບຢູ່ໃນຊະວາ, ເຂດປົກຄອງອື່ນແບບເກົ່າໆ ແລະຂອງພວກເອີຣົບ ແຕກຫນໍ່ຈໍ່ຈາວຂຶ້ນ. ໂຄງສ້າງດ້ານລາຍຮັບພາສີອາກອນຂອງອານານິຄົມ ໄດ້ຮັບການຈັດຕັ້ງຄືນໃໝ່ ດ້ວຍການລຶບລ້າງລະບົບຜູກຂາດຢາສູບໃນປີ 1881 ແລະດ້ວຍການປະຕິຮູບພາສີທົ່ວໄປໃນປີ 1884. ໃນປີ 1886 ກໍມີຄວາມພະຍາຍາມປັບປຸງການບໍລິຫານຂັ້ນແຂວງໃຫ້ທັນສະໄໝຂຶ້ນ ດ້ວຍການແຕ່ງຕັ້ງ ຜູ້ກວດ ການປະຈຳແຂວງ ແລະດ້ວຍການຊັບຊ້ອນຕຳແໜ່ງອຳນາດຂອງເຈົ້າແຂວງໃໝ່. ປະມວນກົດໝາຍ ອາຍາຂອງ ສະເປນ ກົດໝາຍແພ່ງ ແລະກົດໝາຍການພານິດ ຖືກຂະຫຍາຍອອກໃຫ້ກວມກຸ້ມເຖິງ ຜູ້ຢູ່ອາໄສໃນອານານິຄົມທັງຫມົດ; ກົດໝາຍ ບີຊີຣາ (Becerra) ປີ 1889 ສ້າງຕັ້ງສະພາມະຄອນ ອາຍຸນ ຕະມຽນໂຕ (ayuntamiento) ຄ້າຍຄືກັບສະພາຂອງສະເປນເອງ ແລະໃນປີ 1893 ກົດໝາຍໂມຣະ (Maura) ກໍໄດ້ເຮັດໃຫ້ການຈັດຕັ້ງລະດັບເທດສະບານ ທັນສະໄໝຂຶ້ນ. ດັ່ງນັ້ນ ໂດຍທົ່ວໄປແລ້ວ ຮູບແບບ ສັກດິນາປອມໆຂອງຍຸກຕົ້ນ ກໍໄດ້ຖືກປ່ຽນແປງໄປ ຂະນະທີ່ສະເປນ ພະຍາຍາມປົ້ນຈາກການປົກຄອງ ແບບທາງອ້ອມອັນຫລົ້ມແຫລວ ມາເປັນການປົກຄອງໂດຍກົງ ແບບໂຮມສູນ ແລະປາສະຈາກຄະນະສົງ.

ການຂະຫຍາຍອານາເຂດຂອງສະເປນ ລົງສູ່ພາກໃຕ້ ຈາກ ລູຊອນ ແລະ ບິສາຍະ ດຳເນີນຄຽງຄູ ໄປກັບຄວາມພະຍາຍາມຈັດຕັ້ງພາຍໃນຄືນໃໝ່. ມະນີລາ ອ້າງສິດຢູ່ເໜືອດອນມິນດາ ນາວ ກັບ ສູລູ ຢູ່ຕັ້ງດົນໃນນາມວ່າເປັນສ່ວນນຶ່ງໃນຈເຂດການປົກຄອງຂອງຕົນ ແຕ່ນອກຈາກຊາຍຝັ່ງທາງເໜືອ ຂອງ ດອນ ມິນດາເນົາ ແລະ ເມືອງດ່ານຫນ້າຢູ່ ຊຳບວງງະ (Zamboanga) ແລ້ວ ມະນີລາ ບໍ່ເຄີຍສາມາດ ອ້າງສິດທີ່ຢ່າງມີຜົນບັງຄັບໃຊ້ກັບພວກລັດຂອງ ສຸນລະຕານມຸສະລິມ ກັບປະຊາຊົນໃນເຂດນັ້ນ ໄດ້ຈັກເທື່ອ. ໃນລະຫວ່າງກາງສະຕະວັດທີ 19, ໂດຍຖືກຄວັກຄິດດ້ວຍຄວາມຢ້ານກົວໃນເລື່ອງທີ່ວ່າ ເຂດ ແດນເຫລ່ານີ້ ອາດຈະຕົກຢູ່ໃນອຳນາດຂອງຊາວເອີຣົບອື່ນ ແລະຖືກຄ້ຳຊູດ້ວຍເຕັກໂນໂລຊີອັນເໜືອກວ່າ ທີ່ມາໃນຮູບເຮືອ ຈັກອາຍນ້ຳ, ພວກສະເປນ ຈຶ່ງຫັນເຫລົ່ງໃຕ້. ໃນປີ1847 ພວກເຂົາອະນຸຍາດໃຫ້ທະຫານ ຊາວບາສ ໂຊກດີ ຜູ້ນຶ່ງຊື່ ໂອຍັນກຸເຣນ (Oyanguren) "ນັກຮົບຜູ້ສຸດທ້າຍ" ໃຫ້ຈັດຕັ້ງກອງກຳລັງສ່ວນຕົວ ອອກໄປຕໍ່ສູ້ກັບຊາວ ມຸສະລິມ ຢູ່ອ່າວດາເວົ້າ (Gulf of Davao) ຄວາມຈິງແລ້ວ ເຂົ້າປະສົບຄວາມສຳ ເລັດໂດຍການນຳເອົາ ຂົງເຂດນັ້ນເຂົ້າຢູ່ພາຍໃຕ້ການຄວບຄຸມຂອງສະເປນ. ໃນປີ 1859 ພວກເຍຊູອິສ ໄດ້ ຮັບອະນຸຍາດ ໃຫ້ກັບມາ ເຮັດວຽກເຜີຍແຜ່ ຂອງພວກເຂົາຢູ່ມິນດາເນົາ ແລະໃນສີ່ສະຕະວັດຕໍ່ມາ ພວກເຂົາກໍເປັນຜູ້ສະໜັບສະ ໜຸນ ໃຫ້ລັດຖະບານສະເປນ ດັບສູນຖານທີ່ໝັ້ນທີ່ເຫລືອຢູ່ຂອງມຸສະລິມ ໂດຍສະເພາະ ລັດສຸນລະຕານສູລູ.

ການບຸກຄືບໜ້າລົ່ງໃຕ້ ຊ່ວຍເຮັດໃຫ້ການອ້າງສິດຂອງມະນີລາ ເໜືອດິນແດນພາກໃຕ້ ຂັດຕໍ່ ອຳນາດເອີຣົບຄູ່ສັດຕູ ແຕ່ກໍຍັງໄກທີ່ຈະຄວບຄຸມການບໍລິຫານໄວ້ໄດ້. ຈົນວ່າພວກອາເມລິກາໄດ້ເຂົ້າມາ ແທນບ່ອນພວກສະເປນຢູ່ໃນຟີລິບປິນ ແລ້ວເຂດມຸສະລິມພາກໃຕ້ ຈຶ່ງສະຫງົບລົງໄດ້ ແລະກຶກໂຮບເຂົ້າເປັນ ອານານິຄົມດຽວກັນ. ພວກອະເມລິກາ ປ່ຽມລົ້ນໄປດ້ວຍພະລັງຈັກກະພັດ ມີທັງກອງທັບທີ່ເຂັ້ມແຂງ ປະ ສິດທິພາບສູງ ແລະເນື່ອງຈາກວ່າພວກໂປຣເຕສແຕນ ທີ່ເປັນຕົວແທນທາງອານາຈັກນັ້ນ ບໍ່ກໍ່ໃຫ້ເກີດ ຄວາມເປັນປໍລະປັກ ທາງສາສະໜາແຮງເທົ່າກັບທີ່ ສະເປນ ເຄີຍມີມາເມື່ອສາມສະຕະວັດ ແຫ່ງສົງ ຄາມສັກສິດ. ໃນເດືອນສິງຫາ 1899 ນາຍພົນອາເມລິກາຄົນນຶ່ງຊື່ ຈອນ ເບທ (John Bates) ໄດ້ເຈລະ ຈາຂໍ້ຕົກລົງສະບັບນຶ່ງກັບສຸນລະຕານ ແຫ່ງສູລູ ໂດຍສັນຍາວ່າຈະໃຫ້ເງິນ ເສລີພາບທາງສາສະໜາ ແລະ ການຄຸ້ມຄອງ ເປັນການແລກປ່ຽນກັບການເຂົ້າເປັນພາຄີ ແລະເພື່ອຍຸຕິການຄ້າຂາຍຂ້ອຍທາດ ແລະການ ປຸ້ນຂ້າ. ສັນຍາເບທ ກັບສຸນລະຕານ ເບິ່ງຄືວ່າຜ່ອນຜັນເກີນໄປ ໃນສາຍຕາຂອງທ່ານ ເລໂອນາກ ວູດ ທີ່ໄດ້ ມາເປັນຜູ້ບັນຊາການຢູ່ແຂວງ "ໂມໂຣ". ເຂົາເບິ່ງການນຳພາຂອງມຸສະລິມ ເປັນຄືການສໍ້ລາດບັງ ຫລວງ

ຂ້ຫລັກແລະໂຫດຫ້ຽມ... ບໍ່ມີຫຍັງຫລຸດ ຫລືລີ່ນການເຕົ້າໂຮມອັນໄຮ້ຄວາມສຳຄັນຂອງຊຸມໂຈນ ສະຫລັດຫລື ໂຈນປຸ້ນຄົນຕາມກະຫນົນຫລວງ "ແລ້ວກໍນຳໃຊ້ກົດລະບຽບອັນເຂັ້ມງວດກວ່າເກົ່າ. ການດຳເນີນການ ທາງການທູດ ແລະການຜ່ອນຜັນ ໄດ້ຖືກຫົດແທນດ້ວຍການກົດດັນດ້ວຍກຳລັງ ທະຫານ: ເຊັ່ນຕົວຢ່າງໃນປີ 1906 ຊາວມຸສະລິມ ຖືກຂ້າຕາຍ ເກືອ 600 ຄົນ ຢູ່ເດີ່ນປະຫານບູດ ດັດໂຈ ເທິງດອນໂຈໂລ. ຢ່າງໃດກໍດີ ພວກອາເມລິກາກໍບໍ່ເຄີຍນາບຂູ່ ສະຖານະພາບຕາມກົດຫມາຍ ຂອງ ສຸນລະຕານຈັກເຫື່ອ ໂດຍຮຽກຮ້ອງ ເພີ່ນວ່າ ຜູ້ນຳພາດ້ານຈິດວິນຍານແຫ່ງວັດໂມຫະເມັດດັນ ຢູ່ໃນຫມູ່ ເກາະດອນສູລູ" ດັ່ງນັ້ນ ເຂດມຸສະລິມ ພາກໃຕ້ ຈຶ່ງຖືກເຊື່ອມຕິດເຂົ້າເປັນສິ່ງທີ່ຕໍ່ມາ ກາຍເປັນ ສາທາລະ ນະລັດຟິລິບປິນ.

# ບົດທີ 21: ໂຄງຮ່າງ ຂອງລະບົບລາຊະການ ແລະເສດຖະກິດ

ເມື່ອເບິ່ງຄວາມອຸ່ນອາຍທາງການເມືອງ ຢູ່ອາຊີຕາເວັນອອກສຽງໃຕ້ ພາຍຫລັງປີ 1941 ແລ້ວ ຄົງຈະເປັນເລື່ອງແປກປະຫລາດຢ່າງນຶ່ງ ທີ່ວ່າເຂດແດນ ເຊິ່ງມັກກຳນົດຂຶ້ນຕາມລຳພັງໃຈໃສ່ແຜນທີ່ ການເມືອງຂອງຍົງເຂດໃນ ລະຫວ່າງປີ 1910 ນັ້ນ ຄວນຈະກົງກັນອ້ອຍຕ້ອຍກັບແຜນທີ່ໃນປັດຈຸບັນ. ໂດຍກ໊ສຳຄັນເລື່ອງຄວາມຮູ້ສຶກຮຸນແຮງຕໍ່ຕ້ານອານາ ນິຄົມນັບແຕ່ປີ 1941, ຄົງເປັນເລື່ອງແປກປະຫລາດ ຄືກັນ ທີ່ວ່ານະຄອນຫລວງເກົ່າຍິ່ງໃຫຍ່ທັງຫລາຍເຊັ່ນ ມັນດະເລ, ເຫວ້, ສຸຣາກາຕາ ແລະ ຢອກຢາກາຕາ ຍັງຄົງຕົວເປັນເມືອງອັນດັບສອງໃນຍຸກອານາ ນິຄົມໃນຂະນະທີ່ ຢ່າງກຸ້ງ ຈາກາຕາ ແລະ ກົວລາລຳເປ ໄດ້ເປັນນະຄອນຫລວງຍຸກແຮກຕົ້ນຂອງອານາ ນິຄົມ ໃນລັດເອກະລາດ ເຊັ່ນ ພະມ້າ ອິນໂດເນເຊຍ ແລະ ມາເລເຊຍ.

ເລື່ອງຍິບຍ່ອຍແບບແປກຕ່າງເຫລົ່ານີ້ ສະແດງໃຫ້ເຫັນວ່າ ການຈັດຕັ້ງຄືນໃໝ່ ໄດ້ເກີດຂຶ້ນຢ່າງ ເລິກເຊິ່ງພໍ ພຽງໃດ ພາຍໃນຫນ່ວຍການເມືອງທີ່ຖືກສ້າງຂຶ້ນເປັນເທື່ອທຳອິດ ພຽງແຕ່ດ້ວຍການຍຶດຄອງ ເທົ່ານັ້ນ. ຢ່າງກຸ້ງ ຍັງຄົງເປັນເມືອງຫລວງ ຂອງລັດພະມ້າເອກະລາດ ຍ້ອນວ່າໃນລະຍະຍຸກອານາ ນິຄົມ ຂຶ້ນແຮງນັ້ນ ມັນໄດ້ກາຍເປັນຖານທີ່ຕັ້ງຂອງຕາຫນ່ວງປະສານງານບໍລິຫານສະໄໝໃໝ່, ລະບົບການ ພິພາກສາຄະດີໃໝ່ ແລະສະພາ ນິຕິ ບັນຍັດ ຕະຫລອດເຖິງການເປັນສູນກາງຂອງນ່ານທະເລ, ສາຍທາງ ລົດໄຟ ແລະຕາຫນ່ວງການຍົນສິ່ງສິນຄ້າທາງນ້ຳ ໃນຍຸກໃໝ່ ແລະຈຸດສຸມຂອງການເກັບພາສີອາກອນ ຕາມປະເພດ, ການທະນາຄານ ແລະລະບົບສິນເຊື່ອ. ສະຫະພາບ ພະມ້າ ຍັງຄົງຮັກສາເຂດແດນໄວ້ຄືເກົ່າ ໃນນາມ ພະມ້າຂອງອັງກິດ ຍ້ອນວ່າໂຄງຮ່າງຂອງລະບົບລາຊະການ ແລະເສດຖະກິດ ອັນສານສອດກັນ ຢູ່ຢ່າງແໜ້ນແຟ້ນນີ້ ໄດ້ເຮັດໃຫ້ການຂຶ້ນຕໍ່ກັບແບບໃໝ່ ສຳລັບທຸກຄົນທີ່ອາໄສຢູ່ໃນຂອບເຂດຊາຍແດນ ເຫລົ່ານັ້ນ ຄ່ອຍໆແບ່ງແຍກພວກເຂົ້າອອກຈາກ ຜູ້ຢູ່ອາໄສພາຍນອກຫລາຍຂຶ້ນເລື້ອຍໆ.

ໃນຂະນະດຽວກັນ ໂຄງຮ່າງຂອງລະບົບລາຊະການແລະເສດຖະກິດ ທີ່ພວມເຕີບໃຫຍ່ຂຶ້ນ ທັງກໍ່ຕົວ ຂຶ້ນ ແລະເລັ່ງລັດກະຈັດກະຈາຍການປ່ຽນແປງຮູບຮ່າງທາງເສດຖະກິດຂອງຍຸກສະໄໝ. ລະບົບລາຊະ ການ ເຕີບໃຫຍ່ຂຶ້ນໄດ້ ກໍຍ້ອນວ່າ ເສດຖະກິດຂະຫຍາຍຕົວຫລາຍ ແລະໃນຂະນະດຽວກັນ ຂ້າລາຊະການ ເຫລົ່ານັ້ນ ກໍຊ່ອຍໃຫ້ເສດຖະກິດເຕີບໃຫຍ່ໄວອີກ. ຢູ່ສະຫຍາມ ພາສີຂາອອກໄດ້ຈາກເຂົ້າສານ ແລະ ຈາກ ຢີ້ກົ່ວ ຢູ່ມາເລ ຖືກນຳມາໃຊ້ເປັນທຶນຈຳນວນມະຫາສານ ໃນການສ້າງທາງລົດໄຟໃນປະເທດ ເຫລົ່ານັ້ນ ໃນເວລາດຽວກັນ ທາງລົດໄຟເອງ ກໍໄດ້ອຳນວຍຄວາມສະດວກ ໃນການສົ່ງສິນຄ້າອອກ ໄດ້ຢ່າງຫລວງ ຫລາຍ ແລະວ່ອງໄວຂຶ້ນ. ລາຍໄດ້ຈາກພາສີຊາວນາ ຫລາຍຂຶ້ນ ຊ່ອຍໃຫ້ລັດຖະບານ ມີເງິນສ້າງຊົນລະປະ ທານ ໃນ ຊວາ ແລະໃນໂກແຊງຊິນ ແລະເຂດຊົນລະປະທານໃໝ່ ກໍໄດ້ຊ່ອຍໃຫ້ຊາວນາ ຜູ້ເສຽພາສີ ຫລາຍ ແສນຄົນ ມີດິນເຮັດນາຫລາຍຂຶ້ນ. ດ້ວຍວິຖີທາງແບບນີ້ ການຍຶດຄອງໂຄງຮ່າງແບບໃໝ່ ແລະການ ເຄື່ອນໄຫວ ແບບກວາດລ້າງທາງເສດຖະກິດ ຈຶ່ງເກື້ອຫນຸນເຊິ່ງກັນແລະກັນ ຢູ່ໃນວົງຈອບ ແຫ່ງການ ປ່ຽນແປງແບບປະຕິວັດ.

## ໂຄງຮ່າງລະບົບລາຊະການ

ເພື່ອໃຫ້ເຂົ້າໃຈເຖິງຈຸດກຳເນີດຂອງຂອງລັດຖະບານ ຕາມລະບົບລາຊະການສະໄໝໃໝ່ ຢູ່ໃນ ອາຊີຕາເວັນອອກສຽງໃຕ້ ເມື່ອປາຍສະຕະວັດທີ19 ພວກເຮົາບໍ່ຄວນຕັ້ງຕົ້ນ ດ້ວຍແຜນຜັງຊັ້ນຕຳແໜ່ງ ຂອງຜູ້ກຳອຳນາດ, ແຕ່ຕ້ອງຕັ້ງດ້ວຍບັນຍາກາດທາງວັດທະນະທັມ ເຊິ່ງໃນນັ້ນ ໄດ້ມີການດຳເນີນການ

ທົດລອງໃຫມ່ໆຢູ່ໃນອົງການຈັດຕັ້ງ. ພວກເຮົາຄວນເບິ່ງຮູບພາບແຫ່ງການເວລາ. ພວກຫົວໜ້າຊາວ ອາເຈ ຢືນວາງທ່າຢ່າງອົງອາດແຝງຂົ່ມຂູ່ເລັກນ້ອຍ ຢູ່ຕໍ່ໜ້າເຮືອນຕູບ ມຸງຫຍ້າ, ພວກແມ່ຍິງເຊື້ອເຈົ້າ ໃນລາຊະວັງສະຫຍາມ ຈົ່ງຜົມສັ້ນ ແບບທະຫານເຮືອ ໃນຍຸກນັ້ນ ພວກຂຸນນາງຫວຽດນາມ ສຸບເສື້ອຍາມ ຍາວ ແລະຢູ່ອ້ອມໆພວກເຂົາ ກໍມີຄົນຂາວຊາວເອີຣົບ ຜູ້ໃຫຍ່ຕຸ້ຍ ໃສ່ເກີບໂບກສູງ ຫລື ບໍ່ກໍຫົ່ມຜ້າຕຸ້ມຍາວ ແຕ່ງເອ້ດ້ວຍຫລຽນກາຄຳຊອບ. ພວກເຮົາຄວນອ່ານບົດລາຍງານຂອງພວກເອີຣົບ ທີ່ມາຢ້ຽມຢາມແດ ເຊັ່ນ ທ. ຄຣາວຟ໋ອດຣ໌, ທ. ປາວີ ແລະ ນາງແອນນາ ລຽວໂນວເວັນ ແລະຊີວະປະຫວັດສ່ວນຕົວຂອງ ອາຊ ມາດ ດະຈາດິນິນກຣາດ ແລະ ມຸນຊີ ອັບດຸນລາ. ພວກເຂົາທັງຫມົດນີ້ ຕ່າງສຳຫລວດຜືນແຜ່ນດິນ ແປກປະຫລາດແຫ່ງນີ້ ໄປຕາມແບບຂອງພວກເຂົາ. ພວກເຮົາຄວນອ່ານນິຍາຍຕອນສຸດທ້າຍຂອງໂຈເຊຟ ຄອນຣາດ, ໃນນັ້ນ ທ. ຈິມ ເດີນທາງມາປາຕູຊານ ແລະຄົ້ນພົບວິຊາຊີບຂອງເຂົາຢູ່ຫນີ້ ໂດຍນຳເອົາ ສັນ ຕິພາບ ຄວາມເປັນລະບຽບຮຽບຮ້ອຍມາສູ່ຜືນແຜ່ນດິນ ຣາບພຽງນ້ອຍໆແຫ່ງນີ້ ຈາກນັ້ນ ກໍໄດ້ກາຍເປັນ ທ່ານຂຸນນາງປະຈຳຖິ່ນເລີຍ.

ການທີ່ເຮືອປືນໃຫຍ່ ແລະກອງທະຫານໃນເຄື່ອງແບບໄດ້ສະຖາປະນາອຳນາດຂຶ້ນຢ່າງເປັນໂຕ ຕົນນັ້ນບໍ່ແມ່ນເລື່ອງໃຫມ່ສຳລັບຄົນອາຊີຕາເວັນອອກສຽງໃຕ້ດອກ ແຕ່ບໍ່ມີຫຍັງບອກໃຫ້ຮູ້ວ່າ ມັນຈະຖືກ ຫມຸນໃຊ້ແນວໃດ ຫລັງຈາກນັ້ນ. ການສ້າງລະບົບບໍລິຫານແບບທັນສະໄຫມ ເປັນຄວາມສຳເລັດທາງວັດ ທະນະທັມ ອັນຍິ່ງໃຫຍ່ ເຫນືອສິ່ງໃດຫມົດ ຢູ່ໃນຫົວຂອງຜູ້ກຳອຳນາດໃຫມ່ຕ່າງຊາດ ທີ່ມາເພື່ອກຳນົດ ຮູບຮ່າງຕາມ່າງການບໍລິຫານໄວ້ລ່ວງໜ້າໃຫ້ກວາມປົກຫົວດິນແດນ ອັນຜິດແຜກແປກຕ່າງກັນນີ້ ເຊິ່ງ ກໍເປັນໄປຕາມແບບແຜນເກົ່າໆ ຂອງລັດຖະບານ. ຢູ່ໃນການພົບພໍ້ກັນລະຫວ່າງບຸກຄົນເຫລົ່ານີ້ ກັບຜູ້ ອາວຸໂສ ຂັ້ນນຳທ້ອງຖິ່ນ ແລະດ້ວຍຄວາມສະດວກສະບາຍ ທີ່ພວກເຂົາໄດ້ຮັບ ຕໍ່ມາກໍໄດ້ກາຍເປັນສິ່ງ ສຳຄັນກວ່າທຸກຢ່າງ ໃນຫົວຄຶດຂອງຊາວອາຊີຕາເວັນອອກສຽງໃຕ້ທຸກໆຄົນ. ຂະບວນການໄດ້ແຮກກໍ່ຂຶ້ນ ກັບພວກຊົນຊັ້ນປົກຄອງອານານິຄົມ ແລະຢູ່ກະໂຕພາຍໃນພວກເຂົາເອງ ເຊິ່ງເປັນຜູ້ກຳອຳນາດໃນປີ 1870 ຫລື ໄດ້ອຳນາດໃນເວລາບໍ່ດົນຫລັງຈາກນັ້ນ ແລະພວກຄົນຊັ້ນສູງ ຂອງສະຫຍາມ ທີ່ຜັດທະນາປະເທດ ໃຫ້ທັນສະໄຫມຂຶ້ນ ກໍເຕົ້າໂຮມກັນຢູ່ອ້ອມອ້າງພະເຈົ້າຊີວິດຈຸລາລົງກອນ ແລະອ້າຍນ້ອງຂອງພະອົງ. ພວກ ເຂົາເປັນຄົນກຸ່ມນ້ອຍໆ ທີ່ມີຈຳນວນພຽງຫນ້ອຍດຽວ ບາງເທື່ອອາດຈະຫນ້ອຍກວ່າ ພວກຊົນຊັ້ນສູງ ທີ່ເຮັດວຽກການປົກຄອງສ່ວນໃຫຍ່ນັ້ນຊ້ຳ. ແຕ່ສິ່ງສຳຄັນຕໍ່ສະຖານະການຂອງພວກເຂົາ ແມ່ນລະດັບ ວັດທະນະທັມອັນແຕກຕ່າງ ກັບລາສະດອນຂອງພວກເຂົາເອງ. ແນ່ນອນວ່າ ຜູ້ຖືໄຊະນະໃນຫມູ ຊາວພຸດ ຊາວມຸສະລິມ ແລະຜູ້ນັບຖືຂົງຈື້ນັ້ນ ແມ່ນຊາວຄຣິດ ທີ່ປາກເວົ້າພາສາຕ່າງປະເທດ ແລະນຸ່ງໂສ້ງຂາ ຍາວ. ອັນສຳຄັນຍິ່ງໄປກວ່ານີ້, ເພາະວ່າ ພະເຈົ້າຊີວິດຈຸລາລົງກອນ ເປັນຄົນສະຫຍາມ ແລະພວກສະເປນ ເປັນຊາວກາໂຕລິກ ເຊັ່ນດຽວກັບ ຄົນຟິລິບປິນ ພວກເຂົາແຍກຕົວອອກຈາກກຸ່ມຄົນ ພາຍໃຕ້ ການປົກຄອງ ກໍດ້ວຍການສຶກສາແບບທັນສະໄຫມຂອງພວກເຂົາເອງ. ດັ່ງນັ້ນ ສ່ວນຫລາຍຈຶ່ງເຊື່ອໃນ "ຄວາມກ້າວໜ້າ" ແລະເຫັນວ່າ ໃນຂັ້ນຕົ້ນ ອຳນາດແມ່ນພາຫະນະທີ່ພາໃຫ້ເກີດການປ່ຽນແປງ. ໂດຍ ມີທ່າທີພື້ນຖານແບບ ດຽວກັນ ອັນແບ່ງແຍກພວກເຂົາອອກໄປຕ່າງຫາກ ແລະພວກເຂົາເອງສ່ວນຫລາຍ ກໍເປັນຂ້າລາຊະການ ຮັບໃຊ້ຢູ່ໃນລະບົບລາຊະການ ພວກເຂົາຈຶ່ງໄດ້ສ້າງກຸ່ມກ້ອນທີ່ແຫ້ນນຫນຽວ ດ້ວຍສິ່ງທີ່ອາດເອີ້ນໄດ້ວ່າ ເປົ້າໝາຍແບບປະຕິວັດ ເຊິ່ງພຽງແຕ່ ພັນລະນາເຖິງຊື່ໆ ກໍເຮັດໃຫ້ພວກເຂົາຢ້ານຕາເຫລືອກໄປແລ້ວ.

ໃນລະຍະຕົ້ນຂອງຍຸກສູງສຸດຂອງອານານິຄົມ ເປົ້າຫມາຍເຫລົ່ານັ້ນ ຍັງຄົງເປັນໂຄງຮ່າງແຫ່ງ ອະນາຄົດ ທີ່ພໍເປັນໄປໄດ້ເທົ່ານັ້ນ. ເວົ້າເຖິງການບໍລິຫານແບບໃຫມ່ໆນັ້ນ ແມ່ນແຕ່ໃນບ່ອນທີ່ມັນບໍ່ໄດ້ຖືກ ນຳເຂົ້າມາໃຫມ່ ຫລື ຢູ່ບ່ອນທີ່ສະພາບທາງການເມືອງບໍ່ແນ່ນອນ, ການບໍລິຫານແບບໃຫມ່ ກໍບໍ່ໄດ້ກ້າວ ຫນ້າຫລືຕົກຕ່ຳ. ການຄົມມະນາຄົມລຳບາກ ທັງຂ້າຫລວງອານານິຄົມເອງ ທັງພວກລູກນ້ອງຂອງເພິ່ນ ໃນທ້ອງຖິ່ນ ຕ່າງກໍປະຕິບັດວຽກງານໄປຕາມຫົວຄຶດລິເລີ່ມຂອງຕົນເປັນຕົ້ນຕໍ. ພະນັກງານທ້ອງຖິ່ນ ເຊິ່ງ ດຳລົງຊີວິດຢູ່ຕາມຫົວເມືອງນ້ອຍໆຫ່າງໄກຫມູ່ ແຕ່ງດອງເອົາແມ່ຍິງຊາວບ້ານເປັນເມຽ ດ້ວຍວ່າ ຂະນະ

ນັ້ນ ມີພວກແມ່ຍິງເອີຣົບ ເດີນທາງມາຢູ່ອາຊີຕາເວັນອອກສຽງໃຕ້ພຽງແຕ່ຫນ້ອຍດຽວເທົ່ານັ້ນ. ໃນເງື່ອນໄຂແບບນີ້ ການປັບປ່ຽນຕົວເຂົ້າກັບຮີດຄອງປະເພນີຂອງທ້ອງຖິ່ນ ຮູບແບບການໃຊ້ຊີວິດ ແລະລັກສະນະການປົກຄອງ ຈຶ່ງເປັນເລື່ອງທັມມະດາທົ່ວໄປ ໃນເຂດທີ່ຄົນເອີຣົບ ເຄີຍປົກຄອງມາກ່ອນ ເຊັ່ນ ຟິລິບປິນ ຄຣິດ ແລະ ຊະວາ. ການປັບປ່ຽນຄ່ອຍໆກາຍເປັນລະບົບ ແລະຮີດຄອງປະເພນີເດີມ ກໍຄ່ອຍຜ່ອນຜັນລົງ. ໃນເຂດອານານິຄົມໃຫມ່ໆ ເຫດການແບບດຽວກັນໄດ້ເຮັດໃຫ້ເກີດຄວາມແຕກຕ່າງຫລາກຫລາຍຢູ່ໃນການປະຕິບັດ ແລະລະບົບການປົກຄອງທີ່ມີລັກສະນະເປັນສ່ວນບຸກຄົນຢ່າງສູງ.

ໃນຊີວິດຈິງ, ທ່ານຂຸນນາງຈົມ ແຫ່ງ ຄອນເຣດ ມີຫມູ່ຄູ່ພັກພວກຫລາຍສິບຄົນເຊັ່ນ ຣໍາຟຣີ ເບີກເລຍ ພະນັກງານຂັ້ນເມືອງ ຜູ້ມີຊື່ສຽງຢູ່ໃນມາລາຢູ ເມື່ອສະຕະວັດ ທີ19 ຈົນໄດ້ຮັບສົມມະຍານາມວ່າ " ພະຍາ ແຫ່ງກຣິກ". ແຕ່ຄວາມສາມັກຄີຂອງຊົນຊັ້ນປົກຄອງນັ້ນແຫນ້ນຫນຽວດີ ແລະຫນ່ແຫນງແຫ່ງການປ່ຽນແປງກໍໄດ້ຢັ່ງຮາກເລິກລົງໃນຫົວພວກເຂົາແລ້ວ. ຄືກັນກັບການເບິ່ງແຍງແບບຢູ່ຫ່າງໆ ຂອງຂ້າຫລວງຜູ້ທໍາອິດ ຂອງເຈົ້າຊີວິດຈຸລາລົງກອນ ທີ່ປະຈໍາ ຢູ່ຫົວເມືອງລາວ ເຊັ່ນ ຊຽງໃຫມ່ ໃນຊຸມປີ 1870 ແລະ 1880, "ອານາຈັກ" ຂອງ ເບີກເລຍ ກາຍເປັນສະຖາບັນຊາຍແດນ ຢູ່ໃນລະບົບບໍລິຫານລາຊະການ ທີ່ແຜ່ກວ້າງອອກ. ໃນຊຸມທົດສະວັດຫລັງໆຂອງສະຕະວັດທີ19 ເນື່ອງຈາກຝ່າຍບໍລິຫານສ້າງລາຍຮັບໄດ້ຫລາຍກວ່າເກົ່າ, ການຄົມມະນາຄົມດີຂຶ້ນ ແລະພະນັກງານກໍມີຫລາຍກວ່າເກົ່າ, ວິທີການແບບເກົ່າໆ ຈຶ່ງຖົດຖອຍໄປ, ພະນັກງານອານານິຄົມຮຸ່ນໃຫມ່ ປາກົດໂຕຂຶ້ນ ດ້ວຍຄວາມຮູ້ສຶກຮັບຜິດຊອບຕໍ່ພາລະກິດອັນເຂັ້ມແຂງແລະຍິ່ງໃຫຍ່ກວ່າ. ໃນຫນັງສືອຽນທີ່ອອກເຜີຍແຜ່ເປັນຊຸດໆໃນຊຸມປີຫລັງ1900, ລັດຖະບານຂອງເນເທີແລນອິນດີສ ໄດ້ເຕືອນເຈົ້າຫນ້າທີ່ຂອງຕົນ ບ່ໃຫ້ໃຊ້ເຄື່ອງຂອງປະກອບພິທີກັມ ເຊິ່ງພວກເຂົາເຄີຍ ນໍາໃຊ້ເປັນສັນຍະລັກແຫ່ງການປົກຄອງແບບຊະວາຂອງພວກເຂົາ. ການທີ່ ພະນັກງານອານານິຄົມມັກແຕ່ງດອງກັບແມ່ຍິງເອີຣົບຫລາຍກວ່ານັ້ນ ໄດ້ເຮັດໃຫ້ມີຄວາມເຄັ່ງຕຶງ ເຊິ່ງເລື່ອງນີ້ ຖືກເປີດເຜີຍອອກຢູ່ໃນນິຍາຍ ເລື່ອງສັ້ນ ພາສາມາລາຢູ ຂອງ ໂຊເມີເຊັຕ ມໍກັມ (Somerset Maugham) ເຊິ່ງໂງກັບຄືນມາຫາແກນເລື່ອງກ່ຽວກັບເມຽ, "ເມຽນ້ອຍຄົນພື້ນເມືອງ" ແລະພວກລູກຊອດຜິວຂາວ. ໃນປະເທດສະຫຍາມ ທີ່ບໍ່ເປັນອານານິຄົມ ຊົນຊັ້ນຜູ້ນໍາຮຸ່ນໃຫມ່ ເຊິ່ງຂ້າທາດບໍລິວານຂອງເຈົ້າຊີວິດຈຸລາລົງກອນ ໃນຕອນທໍາອິດ ກໍແມ່ນຄົນສະຫຍາມ ແລະຍັງຍຶດຫມັ້ນຢູ່ໃນຄ່ານິຍົມອັນສໍາຄັນໆ ຢ່າງຫລວງຫລາຍຢູ່. ແຕ່ໃນຊຸມປີ 1880 "ສະຫຍາມຜູ້ຫນຸ່ມນ້ອຍ" ກໍມີຫລາຍອັນຫລາຍແນວແຕກຕ່າງ ກັບພວກຂຸນນາງຊັ້ນປົກຄອງ ຫົວຮີດເດີມ ເຊິ່ງຖືກປ່ຽນບ່ອນໂດຍຕົວແທນຂອງພວກເຂົາ ທີ່ເປັນຄົນຕ່າງຊາດ. ພວກເຂົາເອົາໃຈໃສ່ເຮັດນໍາແບບຢ່າງການຈັດຕັ້ງອົງການບໍລິຫານ ແລະຄວາມປະພຶດປະຕິບັດຂອງພວກຢູລົບ ນັບຖືໂມງເວລາເຂົ້າການ ແລະດັດແປງການນຸ່ງຖື ຕາມຄວາມນິຍົມຂອງເອີຣົບ, ລົງມືເຮັດທຸລະກິດຕາມຮູບແບບວຽກງານໃນແຜ່ນເຈ້ຍ, ທັງຫມົດນີ້ ບໍ່ມີຫຍັງໃກ້ຄຽງ ກັບວິທີການບໍລິຫານແບບສ່ວນບຸກຄົນຂອງຮຸ່ນກ່ອນເລີຍ.

ການປ່ຽນແປງຢູ່ໃນວາດຊົງການດໍາລົງຊີວິດແບບນີ້ ສະທ້ອນໃຫ້ເຫັນຄວາມເຊື່ອຫມັ້ນສູງຂຶ້ນໃນຕົນເອງ ແລະການແນມເຫັນການປ່ຽນແປງຢ່າງກວ້າງໆ ຢູ່ຖ້າມກາງຜູ້ຄົນຫມູ່ນ້ອຍໆ ຂອງຜູ້ຮັບຜິດ ຊອບຊັ້ນສູງ ຂອງຝ່າຍບໍລິຫານແບບໃຫມ່. ຄົນແບບນັ້ນ ມັກມີມານະຈິງຈັງ ແລະອຸດົມການແຮງກວ່າພວກຮຸ່ນກ່ອນ ຜູ້ເຊິ່ງໃນສະໄຫມກ່ໍຕັ້ງນັ້ນ ຍັງມີແນວຄຶດສົງໄສຢູ່ເລີກໆ ຕໍ່ລະດັບການປ່ຽນແປງ ທີ່ພວກເຂົາສາມາດສ້າງຂຶ້ນມາໄດ້. ໃນຖານະຄົນຫມູ່ນຶ່ງ ພວກເຂົາຍັງຂາດເຂີນສະເຫນປະຈໍາໂຕແບບທີ່ຄົນຮຸ່ນກ່ອນໆເຄີຍມີ, ປາກເວົ້າພາສາທ້ອງຖິ່ນບໍ່ລຽນໄຫລ ຫລືບໍ່ໄດ້ເລີຍ ແລະຂາດຄວາມເຂົ້າໃຈສັງຄົມຕ່າງໆ ທີ່ພວກເຂົາຄຶດວ່າຕົນເອງພວມປັບປຸງຢູ່. ປະມານປີ 1900 ເກືອບທົ່ວທຸກບ່ອນ ໃນອາຊີຕາເວັນອອກສຽງໃຕ້ ພວກເຂົາໄດ້ກາຍເປັນຂ້າລາຊະການປະຈໍາເຕັມຕົວ ທີ່ເຮັດວຽກທົ່ວໄປ ສໍາລັບການບໍລິຫານປົກຄອງປະເທດຕ່າງໆໃນພາກພື້ນ ດ້ວຍສີມືອັນມີປະສິດທິພາບສູງຂຶ້ນເລື້ອຍໆ ແຕ່ຫາກແຂງກະດ້າງ.

ໃນຊຸມທົດສະວັດສຸດທ້າຍຂອງສະຕະວັດທີ 19 ຂະນະທີ່ພວກລ່າຫົວເມືອງຂຶ້ນ ແລະຊົນຊັ້ນນຳ ສະຫຍາມ ກຳລັງແປງຮູບໂສມຢູ່ນັ້ນ, ການປ່ຽນແປງຢ່າງອື່ນໆກໍໄດ້ບັງເກີດຂຶ້ນ ຢູ່ໃນຄວາມສັມພັນ ລະຫວ່າງພວກເຂົາ ແລະພວກຊົນຊັ້ນສູງຜູ້ປົກຄອງລັດນ້ອຍໆ ໃນອາຊີຕາເວັນອອກສຽງໃຕ້ ທີ່ພວກເຂົາ ປະເຊີນຫນ້າຢູ່. ນັບແຕ່ມື້ມາຮອດທຳອິດພຸ້ນແລ້ວ, ພວກຊົນຊັ້ນປົກຄອງຊາວເອີຣົບ ຈຳນວນຢິບມືດຽວ ເຫັນວ່າເລື່ອງນີ້ ເປັນເລື່ອງທີ່ຈະຕ້ອງລະມັດລະວັງ ໃຊ້ຄວາມສະຫລຽວສະຫລາດ ແລະຈຳເປັນທີ່ສຸດ ທີ່ຈະ ປ່ອຍໃຫ້ພວກຫົວຫນ້າ ແລະຊົນຊັ້ນປົກຄອງຊາວອາຊີ ປົກຄອງດູແລປະຊາຊົນຈຳນວນຫລວງຫລາຍ ໂດຍກົງ ເທົ່າທີ່ພວກເຂົາເຫລົ່ານັ້ນຈະສາມາດໃຫ້ຄວາມຮ່ວມມືໄດ້. ໃນກະໂຕຫມູ່ພວກເຂົາເອງ ກໍມີຄວາມ ແຕກຕ່າງກັນຫລາຍ ຢູ່ໃນກະໂຕຫາດແທ້ຂອງຄວາມ ຜູກພັນຂອງພວກຕົນ ຕໍ່ລະບົບເອີຣົບແບບສະເພາະ ແລະໃນຍຸກນີ້ ຄວາມປ່ຽນແປງທີ່ນອນຢູ່ໃນຄວາມຜູກ ພັນເຫລົ່ານີ້ ກໍຫາກມີຮູບແບບອັນຕົ້ນຕໍຢູ່ ສາມແບບ.

ລັດເລັກນ້ອຍໆຈຳນວນຫລາຍ ແລະສັງຄົມໃນເຂດລັດສານ-ລາວ ແລະ ມາລາຢູ-ມຸສະລິມ ເຊິ່ງ ຖືໄດ້ວ່າ ແມ່ນລັດຊຸດສຸດທ້າຍ ທີ່ຖືກນຳມາຢູ່ກ້ອງການຄວບຄຸມອັນແຫນ້ນແກ່ນ ຂອງເອີຣົບ (ຫລື ສະຫຍາມ) ເຊິ່ງສ່ວນໃຫຍ່ ຕົກຢູ່ໃນລະຫວ່າງ ປີ1900. ໃນຂົງເຂດເຫລົ່ານີ້ ກໍຄືກັບບ່ອນອື່ນໆ ໂດຍທົ່ວໄປ ພວກເຈົ້າອຳນາດອານານິຄົມ ຕັ້ງຕົ້ນດ້ວຍການປົກຄອງແບບທາງອ້ອມກ່ອນ, ຮັບຮູ້ພວກເຈົ້າຊີວິດ, ສຸລະ ຕານ, ຫົວຫນ້າ ແລະພວກຜູ້ນຳຂັ້ນທ້ອງຖິ່ນ, ໂດຍມອບສິນທິສັນຍາ ຫລືຂໍ້ຕົກລົງຕ່າງຫາກໃຫ້ພວກເພິ່ນ ແລ້ວກໍແຕ່ງຕັ້ງຜູ້ຕາງຫນ້າການເມືອງ ໄວ້ໃຫ້ຄຳແນະນຳ ເປີກສາຫາລືແກ່ພວກເຂົາ. ໃນທົ່ວທຸກຂົງເຂດ ເຫລົ່ານີ້ ຍົກເວັ້ນບາງບ່ອນຫນ້ອຍນຶ່ງເທົ່ານັ້ນ ການຈັດແຈງເລື່ອງວຽກງານບໍລິຫານແບບຫລົມໆ ໄດ້ສືບ ຕໍ່ດຳເນີນມາ ຈົນຮອດຮອດຫວ່າງບໍ່ດົນມານີ້. ກ່ອນປີ 1900, ເລື່ອງແບບດຽວກັນນີ້ ໄດ້ເກີດຂຶ້ນແທ້ ກັບຊຸມ ຊົນຊາວຈີນຝາກທະເລ ຍ້ອນສາເຫດຫລາຍປະການຕ່າງກັນ, ຊຸມຊົນຈີນເຫລົ່ານີ້ ສ່ວນຫລາຍແລ້ວປົກ ຄອງຕົນເອງ ໂດຍຜ່ານ"ສະມາຄົມລັບ" ແລະການຈັດຕັ້ງອື່ນໆ ຂອງພວກເຂົາເອງໂດຍ ຈັດການບັນຫາ ກັບພວກອຳນາດປົກຄອງທ້ອງຖິ່ນ ຜ່ານພວກຊັ້ນນຳ ທີ່ເອີ້ນກັນໃນໂລກຂອງຊາວມາເລວ່າ ທ່ານ ກັບປີແຕນຈີນ (Kapitan China) ຮູບແບບການປ່ຽນແປງແບບຫນຶ່ງ ທີ່ວ່ອງໄວ ແລະຂະຫຍາຍກວ້າງ ອອກໄປໄກກວ່າ ຢູ່ໃນຄວາມສຳພັນລະຫວ່າງການບໍລິຫານຊັ້ນສູນກາງ ກັບຊົນຊັ້ນຜູ້ນຳທ້ອງຖິ່ນ ບົ່ງບອກ ລັກສະນະຂອງກຸ່ມທີສອງໃນຂົງເຂດ ໂຮມທັງລັດມາເລຍຕາເວັນຕົກ, ເຂດຢູ່ຂອງຜູ້ປະຈຳການຕາງຫນ້າ ທາງຝັ່ງຕາເວັນອອກ ຂອງສູມາຕຣາ, ຊະວາ, ສະຫຍາມ, ຫວຽດນາມເຫນືອ ແລະກາງ ກັບ ກຳພູຊາ ໃນລະດັບໃດຫນຶ່ງ. ເຂດທັງຫມົດທີ່ກ່າວມານີ້ ແຕ່ກ່ອນຖືກປົກຄອງພາຍໃຕ້ ສູດການປົງຄອງແບບທາງ ອ້ອມ ໃນບັ້ນປາຍສະຕະວັດທີ 19, ອຳນາດທີ່ພວມເຕີບໃຫຍ ຂອງລັດຖະບານອານານິຄົມ ແລະລັດຖະບານ ສະຫຍາມ ໄດ້ແລ່ນທັນຮູບແບບອັນຫມັ້ນຄົງທາງການເມືອງອັນນັ້ນ. ຍິ່ງໄປກວ່ານັ້ນ ການປ່ຽນແປງ ທາງ ເສດຖະກິດຢ່າງວ່ອງໄວ ຫລື ຈຳນວນພົນລະເມືອງອັນຫລວງຫລາຍ ຂອງພາກພື້ນເຫລົ່ານີ້ ກໍໄດ້ຮຽກ ຮ້ອງໃຫ້ມີວິທີການບໍລິຫານອັນສະຫລັບຊັບຊ້ອນຍິ່ງຂຶ້ນເລື້ອຍໆ. ຊົນຊັ້ນນຳຜູ້ບໍລິຫານສູນກາງ ທີ່ຂະຫຍາຍ ອອກໄປ ແລະກຳແຫນ້ນລະບົບເລ່ານັ້ນໄວ້ ຕ່າງກໍທ້າວທັນຫມາຍຫມັ້ນທີ່ຈະດຳເນີນການໄປຕາມແບບ ຂອງຕົນ ແລະນັບມື້ນັບເຊື່ອຫມັ້ນໃນຄວາມສາມາດຂອງຕົນ ທີ່ຈະເຮັດແບບນັ້ນ, ພວກເຂົາຈຶ່ງກາຍເປັນຜູ້ ຜ່ອນຜັນໂຍະຍານຫນ້ອຍລົງກັບລະບຽບການປົກຄອງແບບທາງອ້ອມ. ໃນກະໂຕພວກຜູ້ນຳຂັ້ນທ້ອງຖິ່ນ ເອງ ພວກເຂົາຍັງຂາດເຂີນເຄື່ອງມືເພື່ອດຳເນີນການປົກຄອງຕາມຮູບແບບໃຫມ່ ແລະໂດຍທົ່ວໄປ ກໍຮູ້ສຶກ ເປັນປໍລະປັກກັບສິ່ງທີ່ຮູບແບບໃຫມ່ຫມາຍຫມັ້ນ ດັ່ງນັ້ນ ການປະຕິບັດວຽກບໍລິຫານວຽກປະຈຳວັນຢູ່ໃນເຂດ ແຂວງຂອງຕົນເອງ ຈຶ່ງນັບນັບມື້ ນັບບໍ່ສອດຄ່ອງ ໂລ່ງລ່ຽນ ໃນເກືອບທຸກກໍລະນີ, ໃຫ້ວ່າເປັນຄືພວກ ກະສັດໃນເອີຣົບ, ພວກເຂົາຖືກຊີ້ຈ້າງຈອບອອຍ ດ້ວຍເງິນຈຳນວນມະຫາສານ ແລະສາລະວົນຢູ່ແຕ່ກັບ ເລື່ອງພິທີກຳ ຂະນະທີ່ພວກຜູ້ນຳອານານິຄົມ ເອົາໂຕຫລົບຫລີກໄປຈັດການກັບຂ້າລາຊະການ ທ້ອງຖິ່ນ ຂັ້ນຕ່ຳໂດຍກົງ. ຜູ້ສຳເລັດລາຊະການຊະວາ ຍັງຄົງໄດ້ຮັບການປະຕິບັດນຳ ຢ່າງໂຍະຍານຫລາຍ ແລະ ນັບມື້ນັບຫລາຍຂຶ້ນ, ຜູ້ປະຈຳການໂຮນລັງ ເປັນຜູ້ອອກຄຳສັ່ງ ແລະຜູ້ກວດກາຊາວດັຊ ຜູ້ຫນຸ່ມນ້ອຍ ໃຫ້ຄຳ

ແນະນຳເປີກສາແກ່ຂ້າລາຊະການຂັ້ນເມືອງ ແລະຮອງລົງມາ ຢູ່ໃນຂົງເຂດ. ຕຳແໜ່ງສຳຄັນ ໃນລາຊະສຳນັກ ທ່ຽວ ກໍຖືກແຊກຊຶມດ້ວຍຂ້າລາຊະການ ຝຣັ່ງ ຂະນະທີ່ພວກຂຸນນາງເກົ່າ ໃນຫວຽດນາມເໜືອ ແລະກາງ ຕົກຢູ່ພາຍໃຕ້ການຄວບຄຸມ ຂອງຜູ້ສຳເລັດລາຊະການສູງສຸດຝຣັ່ງ. ລັດສຸນລະຕານ ຝັ່ງຕາເວັນຕົກ ຂອງມາເລ ຖືກໂຮບເຂົ້າກັນ ໃນປີ 1895 ແລ້ວຜະແໜນກພົນລະເຮືອນ ມາເລ ອັງກິດ ຜະແໜນກນຶ່ງ ຊຶ່ງຢູ່ພາຍໃຕ້ຜູ້ປະຈຳການໃຫຍ່ ກໍປະຖິ້ມວຽກງານທຸກຢ່າງ ນອກຈາກການວາງທ່າວ່າ ເປັນຜູ້ໃຫ້ "ຄຳແນະນຳ" ແກ່ ສຸລະຕານ, ສ່ວນວ່າ ຂ້າລາຊະການອັງກິດຂັ້ນເມືອງ ທີ່ຄວບຄຸມວຽກງານ ບໍລິຫານຂັ້ນຕ່ຳຜິດທຳມະດາ ຊ້ຳລົງໄປຈັດການໂດຍກົງກັບ ແປງກູລູມາເລ (Malay *penghulu*), ພວກເຂົາເອງ ກໍພວມປ່ຽນໄປປະຕິບັດໜ້າທີ່ ແບບອັງກິດ ຫລາຍຂຶ້ນ. ມາເຖິງປີ 1910 ພວກຂຸນນາງ ອາດຍາສິດເກົ່າ ຂອງສະຫຍາມ ຢູ່ຂັ້ນສູນກາງ ແລະບັນດາ ອຸປະຣາດ ກັບພວກຊົນຊັ້ນນຳຂັ້ນແຂວງຢູ່ເຂດ ຫ່າງໄກ ກໍຖືກປົດອອກໃຫ້ກິນເບ້ຽບຳນານ, ເຮັດແນວນີ້ ແຕ່ບາງກອກ ຮອດເມືອງ ເພາະວ່າ ສະຫຍາມ ພວມສ້າງປະເທດ ໃຫ້ມີຊົນຊັ້ນປົກຄອງແຫ່ງຊາດ ພຽງ ຊົນຊັ້ນດຽວ. ຮູບແບບການປ່ຽນແປງແບບທີສາມ ແລະເປັນແບບແຜ່ລາມທີ່ສຸດ ພົບເຫັນຢູ່ໃນ ໂກແຊງຊີນ ແລະ ພະມ້າພາກກາງ ກັບພາກໃຕ້. ຝຣັ່ງຕັດແຍກ ໂກແຊງຊີນ ອອກຈາກຫວຽດນາມທັງຫມົດ , ເຊັ່ນດຽວກັນ ອັງກິດ ກໍໄດ້ຕັດເອົາບາງ ສ່ວນຂອງລາຊະອານຈັກພະມ້າ ແລະຕໍ່ມາ ລຸນຫລັງສົງຄາມຄັ້ງສຸດທ້າຍ ໃນປີ 1885 ກໍໄດ້ລົບລ້າງ ລະບົບລາຊາທິປະໄຕທັງຫມົດ. ດັ່ງນັ້ນ ໃນສອງຂົງເຂດນີ້ ພວກເອີຣົບ ຈຶ່ງບໍ່ໄດ້ ປົກຄອງດ້ວຍລະບອບການປົກຄອງແບບທາງອ້ອມຈັກເທື່ອ ກົງກັນຂ້າມ ນັບຕັ້ງແຕ່ທຳອິດພຸ້ນໂລດ ພວກເຂົາລົງມາຈັດການກັບຜູ້ນຳຂັ້ນທ້ອງຖິ່ນ ລະດັບຕ່ຳໂດຍກົງ ຫລື ບໍ່ ກໍເປັນລະຍະນຶ່ງ ເຊັ່ນ ຢູ່ໂກແຊງຊີນ ດ້ວຍການທົດລອງປະຕິບັດກັບ ກະໂຕຜູ້ນຳທ້ອງຖິ່ນໂດຍກົງ. ນອກຈາກນີ້ ໃນທັງສອງ ກໍລະນີ ຊົນຊັ້ນ ບໍລິຫານຄົນພື້ນເມືອງຮຸ່ນໃຫມ່ ນອກແບບແຜນ ກໍໄດ້ໂປໂລຂຶ້ນ ລະຫວ່າງກ່ອນປີ 1900 ຄືພວກລາມ (ນາຍ ພາສາ) ຂອງ ໂກແຊງຊີນ, ແລະພວກ ອະໂຊຢາມິນ (a-so-ya-min) ໃນ ພະມ້າ. ພວກຫລັງນີ້ ໄດ້ຖືກຄັດ ເລືອກເອົາ ໂດຍຜ່ານລະບົບສອບເສັງດ້ານຄວາມຮູ້ພາສາອັງກິດ, ການສຳຫລວດ ແລະຂະບວນການ ບໍລິຫານ. ໂດຍເລີ່ມແຕ່ລຸ່ມຂຶ້ນໄປ ພວກເຂົາສາມາດປີນຂຶ້ນໄປຖືງຂັ້ນຖັນແຖວສາຍບໍລິຫານ ຕາມລຳດັບຊັ້ນແນວໃຫມ່ ເຊັ່ນ ເປັນຮອງຜູ້ກວດການພະມ້າ ເຊິ່ງເປັນຕຳແໜ່ງສູງສົມຄວນ ທີ່ເຄີຍແຕ່ງຕັ້ງ ກັນຢູ່ ໃນປີ 1908. ມາຮອດ ປີ 1900 ຊົນຊັ້ນ ໂຊຍາມິນ ໄດ້ປັບ ປ່ຽນແບບແຜນການດຳລົງຊີວິດ ປະສົມປະສານ ອັງກິດ-ພະມ້າ ຂອງຕົນເອງ ດັ່ງທີ່ ບັນຍາຍໄວ້ ຢູ່ໃນບົດຄວາມ ເລື່ອງປະຫວັດສາດມ່ວນໆຂອງຄອບຄົວ ມິມີເຂ່ງ (Mi Mi khaing) ຢູ່ໃນປຶ້ມຊື່ ຄອບຄົວພະມ້າ. ຊຸມຕົ້ນປີຂອງສະຕະວັດທີຊາວ ແມ່ນແຫລ່ງສັນປັນນ້ຳ ຢູ່ໃນປະຫວັດສາດແຫ່ງການ ບໍລິຫານຂອງອາຊີຕາເວັນອອກສຽງໃຕ້. ດິນແດນຕ່ອນສຸດທ້າຍໃນຂົງເຂດ ຖືກໂຮມເຂົ້າກັນ ເປັນຫົກ ລັດໃຫຍ່ ທີ່ຖືກກໍ່ຕັ້ງຂຶ້ນ ແລະແລ້ວ ແຜນຮ່າງບໍລິຫານພື້ນຖານອັນນຶ່ງ ທີ່ກວມຄຸມເອົາທັງຫົກປະເທດ ກໍຖືກແຕ້ມແຕ່ງຂຶ້ນ. ຝ່າຍບໍລິຫານສູນກາງຂອງ ເອີຣົບ ກັບ ສະຫຍາມ ໄດ້ເລັ່ງລັດຢ່າງສຸດຂ້ຽວຂາດ ໂດຍມີການແບ່ງຊັ້ນຕຳແໜ່ງ,ມີລະບຽບການຮັບບັນຈຸຢ່າງສະຫມ່ຳສະເໝີ ແລະການຍົກຍ້າຍເລື່ອນຊັ້ນ ແລະ ວຽກງານດ້ານເອກະສານ ກໍຍົກຂຶ້ນເຖິງລະດັບມາດຖານສາກົນ. ພວກເຂົາ (ເອີຣົບ ກັບ ສະຫຍາມ) ຍັງບໍ່ວາງສາຍຕາຈາກດິນແດນນອກເຂດປົກຄອງໂດຍກົງ ແລະໃຫ້ຄຳແນະນຳຄວບຄຸມໃກ້ຊິດ ໃນເລື່ອງວຽກງານທົ່ວໄປ ຢູ່ໃນເຂດທີ່ມີພົນລະເມືອງຢູ່ແໜ້ນໜາ. ມາເຖິງເວລາ ນັ້ນ ເອີຣົບ ແລະສະຫຍາມ ກໍໄດ້ເຂົ້າເຖິງລະດັບຕ່ຳກວ່າຜູ້ປົກຄອງເຈົ້າກົກເຈົ້າເຫລົ່າຢູ່ໃນເກືອບທຸກເຂດ ເພື່ອເຮັດວຽກຜ່ານພວກຫົວໜ້າ ແລະ ຜູ້ນຳເຈົ້າກົກເຈົ້າເຫລົ່າຊາວອາຊີ ຢູ່ໃນການບໍລິຫານລະດັບພາກພື້ນ ແລະທ້ອງຖິ່ນ. ດັ່ງນັ້ນ ຈຶ່ງມີລັກສະນະປະສົມປະສານກັນ ຢູ່ໃນລະບົບບໍລິຫານ ບ່ອນທີ່ຂ້າລາຊະ ການຊາວເອີຣົບຂັ້ນຕ່ຳ (ຫລືວ່າ ໃນເລື່ອງນີ້ ແມ່ນ ບາງກອກ ຂອງສະຫຍາມ) ໄດ້ປະເຊີນໜ້າກັບຊົນຊັ້ນ ນຳທ້ອງຖິ່ນຊາວອາຊີຕາເວັນອອກສຽງໃຕ້ ໂດຍຜ່ານຄວາມແຕກຕ່າງລະຫວ່າງວັດທະນະທຳແລະປະຫວັດສາດ ສະແດງຕົວອອກ ດ້ວຍຄວາມຈຳເປັນທີ່ຈະຕ້ອງຮູ້ສອງພາສາ ຫລື ເປັນລາມແປພາສາ. ນອກຈາກນີ້ ກໍແມ່ນມະຫາຊົນຄົນທຳມະດາ ຜູ້ບໍ່ໄດ່ມີ

ແນວຫຍ້ງກ່ຽວກັບຂ້າລາຊະການຄົນເອີລົບ ບ່ວ່າຈະແມ່ນເລື່ອງທຸລະກິດໃດໆ. ແມ່ນຢູ່ຈຸດນີ້ເອງ ທີ່ເປັນ ຍ້ອຕໍ່ແບບອາດຍາສິດ ແລະຢູ່ໃນສາຍສຳພັນ ລະຫວ່າງລັດສະໄຫມໃຫມ່ ກັບຊາວນາ, ການພັດທະນາ ດ້ານບໍລິຫານ ແຫ່ງທົດສະວັດ ກ່ອນສົງຄາມໂລກ ຄັ້ງທີສອງ ເປັນເຫດການໂດດເດັ່ນ ກວ່າຫມູ.

ຄວາມແຕກຕ່າງລະຫວ່າງວັດທະນະທຳຂອງຊາວເອີຣົບ ກັບຊາວອາຊີຕາເວັນອອກສຽງໃຕ້ ຢູ່ໃນ ຫນ່ວຍບໍລິການຂອງລັດຖະບານ ໄດ້ຂະຫຍາຍວົງກວ້າງອອກໄປອີກໃນຊຸມທົດສະວັດກ່ອນ 1900; ຂະນະທີ່ ຫນ່ວຍບໍລິຫານຂອງຊາວເອີຣົບແຫ່ງລະບອບອາດຍາສິດ ໄດ້ປັບປຸງຕົວເອງໃຫ້ທັນສະໄຫມຂຶ້ນ. ຄວາມແຕກ ຕ່າງອັນນີ້ ຍຸຕິລົງໄດ້ ເປັນສ່ວນໃຫຍ່ ໃນລະຫວ່າງຊຸມທົດສະວັດຕົ້ນໆ ຂອງສະຕະວັດທີຊາວ ເມື່ອຂ້າລາຊະ ການພົນລະເຮືອນ ຊາວອາຊີຕາເວັນອອກສຽງໃຕ້ ເລີ່ມໄດ້ຮັບການສຶກສາແບບທັນສະໄຫມຫລາຍຂຶ້ນ. ສ່ວນ ວ່າ ໃນປີ 1900 ນັ້ນຂ້າລາຊະການໃນລັດຖະບານສ່ວນໃຫຍ່ ຍົກເວັ້ນຊາວສະຫຍາມທີ່ບາງກອກ ລ້ວນແຕ່ໄດ້ ຮັບການສຶກສາມາແບບເດີມ ແລະໄດ້ເຂົ້າມາມີຕຳແຫນ່ງຂ້າລາຊະການ ກ່ຍ້ອນສະຖານະພາບ ຕາມ ປະເພນີ ມາເຖິງປີ 1940 ເບິ່ງລວມແລ້ວ ປາກົດວ່າ ທຸກຄົນໄດ້ຮັບການສຶກສາ ແບບສະໄຫມ ໃຫມ່ທັງຫມົດ ແລະຫລາຍຄົນໄດ້ຮັບຕຳແຫນ່ງສູງໆ ກໍແມ່ນອີງໃສ່ພື້ນຖານອັນນີ້ຫລາຍກວ່າ ການສືບທອດຕຳແຫນ່ງ ຕາມປະເພນີ.

ມີເຫດຜົນຫລາຍອັນຫລາຍແນວສຳລັບການປ່ຽນແປງນັ້ນ. ໃນສະຕະວັດທີ 20 ເມື່ອ ມີລາຍໄດ້ ຈາກພາສີອາກອນຫລາຍຂຶ້ນ ແລະເປົ້າຫມາຍກ້ວ້າງຂວ້າງກວ່າເກົ່າ ວຽກງານບໍລິຫານ ກໍຕີບໃຫຍ ຢ່າງມະຫາສານ ຍ້ອນວ່າມີການໃຫ້ບໍລິການໃຫມ່ທັງຫມົດ ໂດຍຜູ້ຊຳນານວຽກ ເຊັ່ນ ລະບົບໂຮງຮຽນລັດ, ສະຖານີຄົ້ນຄວ້າການກະສິກຳ, ກົມບູຮານວັດຖຸ ທັງຫມົດເຫລົ່ານີ້ ໄດ້ຮັບການສ້າງຕັ້ງຂຶ້ນ ເພື່ອຈະເຊື່ອມ ຕໍ່ການບໍລິຫານແບບເກົ່າໃສ່ກັບອັນໃຫມ່ທີ່ເປັນພື້ນຖານທົ່ວໄປ. ເພື່ອປະຢັດເງິນຕາ ຮວມທັງເພື່ອຄວາມ ຈິງຈັງສັດຊື່ຕໍ່ແນວຄຶດທີ່ກຳນົດຂຶ້ນເອງ ຕາມຄວາມຮັບຜິດຊອບ, ລັດຖະບານອານານິຄົມ ໄດ້ຫມາຍມຸ່ງ ຈັດເອົາຄົນອາຊີຕາເວັນອອກສຽງໃຕ້ ເຂົ້າບັນຈຸຫນ້າທີ່ຕຳແຫນ່ງໃຫມ່ໃຫ້ເຕັມທຸກບ່ອນ. ເພື່ອຈະເຮັດແນວ ນັ້ນໄດ້ ລັກຖະບານຕ້ອງການຜູ້ຄົນທີ່ຜ່ານການສຶກສາແບບໃຫມ່ ບ່ພຽງແຕ່ເພື່ອການບໍລິການແບບພິເສດ ເທົ່ານັ້ນ (ຊຶ່ງເຫັນກັນຢູ່ແລ້ວ) ແຕ່ເພື່ອວຽກບໍລິຫານທົ່ວໄປ (ມາຮອດເວລານັ້ນ ແມ່ນແຕ່ນາຍບ້ານ ກໍຖືກຮຽກຮ້ອງໃຫ້ເລີ່ມເກັບກຳບັນທຶກເຫດການຕ່າງໆແລ້ວ) ດັ່ງນັ້ນ ລັດຖະບານອານານິຄົມ ແລະລັດຖະ ບານສະຫຍາມຈຶ່ງໄດ້ໄຂໂອກາດໄປສູ່ການສຶກສາໃນຮູບການໃຫມ່ຫລາຍຂຶ້ນເລື້ອຍໆ. ໂຮງຮຽນລັດຖະບານ ທີ່ໃຊ້ພາສາເອີລົບໂດຍທົ່ວໄປ (ຫລື ພາສາສະຫຍາມ) ທີ່ແຕກຫນ່ໍ່ຈ່ຳວ ເມື່ອຕົ້ນສະຕະວັດທີ 20 ນັ້ນ ໄດ້ຜະລິດຂ້າລາຊະການພົນລະເຮືອນ ທີ່ເປັນຄົນອາຊີຕາເວັນອອກສຽງໃຕ້ ອອກມາຫລາຍທີ່ສຸດ ໃນຍຸກ ນັ້ນ. ເຖິງແມ່ນວ່າ ນັບແຕ່ຕອນທຳອິດພ້ນແລ້ວ, ມັນໄດ້ກາຍເປັນລັກສະນະສະເພາະ ທີ່ລັດຖະບານ ໄດ້ຈັດ ຫາການສຶກສາແບບທັນສະໄຫມນີ້ມາໃຫ້ ກໍແມ່ນເພື່ອວຽກງານແນວນີ້ໂດຍເຈດຕະນາ. ການຕັ້ງຕົ້ນແບບ ນັ້ນ ອາດພົບເຫັນຢູ່ໃນໂຮງຮຽນນ້ອຍໆ ຕັ້ງຂຶ້ນລະຫວ່າງທ້າຍສະຕະວັດທີ 19 ຢູ່ຊະວາ ໄດ້ມີການຝຶກອົບ ຮົມການສັກຢາ, ການອົບຮົມຄູ ແລະນັກບໍລິຫານໃນອະນາຄົດ. ການສຶກສາແບບນີ້ ໄດ້ແຜ່ກະຈາຍອອກ ໄປຢ່າງວ່ອງໄວ ເມື່ອຕົ້ນສະຕະວັດທີ 20 ເຊັ່ນວ່າ ໂຮງຮຽນອົບຮົມພະນັກງານຊັ້ນເມືອງ, ໂຮງຮຽນ ຕຳ ຫລວດ, ໂຮງຮຽນອົບຮົມພະນັກງານກະສິກຳ ແລະອື່ນໆ ທີ່ຈະຕ້ອງໄດ້ມາສ້າງຕັ້ງຂຶ້ນຢູ່ໃນທຸກໆກະຊວງ ແລະກົມກອງຂອງລັດ ທີ່ບາງກອກ.

ຊາວອາຊີຕາເວັນອອກສຽງໃຕ້ ພົບວ່າໂຮງຮຽນໃຫມ່ ແລະວຽກງານຂ້າລາຊະການ ທີ່ພວກເຂົາ ນຳພາປະຕິບັດຢູ່ນັ້ນ ນັບມື້ນັບດຶງດູດໃຈ. ມີຫລາຍຄົນມາຈາກຄອບຄົວເຈົ້າກົກເຈົ້າເຫລົ່າເກົ່າ ທີ່ເຄີຍເປັນ ທາງຜ່ານເມື່ອທ້າຍສະຕະວັດທີສິບເກົ້າ. ຊົນຊັ້ນຜູ້ສຳເລັດລາຊະການຢູ່ຊະວາ ຖືກປັບປຸງໃຫ້ສອດຄ່ອງ ເຫມາະສົມ ໃນລະຫວ່າງ ຊຸມປີ 1920 ບົນພື້ນຖານໃຫມ່, ມີການຜູກພ້ວກຮາວັດ, ປາກເວົ້າພາສາດັດຊ໌ ແລະຫລໍ່ຫລອມຕົນເອງໃຫ້ເຂົ້າກັບການບໍລິຫານແບບທັນສະໄຫມ, ບັນດາລູກຊາຍຂອງເຈົ້ານາຍ ຈາກຊຽງ ໃຫມ່ ແລະລາວ ຫລຸດຜ່ອນຄວາມຜົວພັນກັບບ້ານເກີດເມືອງນອນຂອງຕົນເອງ ຍ້ອນວ່າ ພວກເຂົາຖືກ

ภวาดโธบเอ้ำในภุ่มชิบชั้นบำแห่วชาดของวสะหยาม. ผู้อื่นๆ เชิ่วส่อนหลาย หลื อาดจะแม่นยู่ ขะอา แม่นบับดาบลูกหลานผู้ชาย ของคอบคัวชิบชั้นบำละดับห้องถิ่น หลื พะนักวาน ชั้นแขอวๆ หลื ชั้นต่ำกว่า. สำลับเอ๊าเจ้าแล้อ ตำแหน่วง้ำลาขะการนผินละเธือน ที่ได้มาด้อยการได้ ธับการเฝิกอ๊บธ๊ม และคุนคอามดิ หลายกว่าชาดกำเนิดเชื๊อสาย มันหมายเถิว ชั้นใดก้าวขึ้นสู่ สะถานะผาบสูวกว่าเก่ำ เชิ่วพายใต้ละบรุบธิดคอวเดิม มันถืกอัดแจบ สำลับพวกเอ๊า มาโดย ตะหลอด. ยังมิคันอื่นๆอิก ในยุกสะตะอัดทิสิบเก้ำ คื พวก อะโขยามิน (a-so-yaa-min) ใน พะม้า, พวกเอ๊ามาจาการถานะต่ำต้อย หลื แม่นแต่คอบคัวชาวบา. เลื่องทำนองนี้ บางที อาด จะเป็นสิ่งทำมะดาย่ใน ฟิลิบปิน ย้อนละบับการสึกสาแบบใช้พาสาอังกิด เป็นต้นตำ การหันป่รุน ละบับง้ำลาขะการนให้เป็นแบบฟิลิบปิน โดยชาวอาเมลิกาได้ดำเนินโไปย่างไอวา. มันเป็นไปได้ ย่แห่วอื่น แต่มันกำกายเป็นภิดเภนอันนึ่งหลายกว่า เป็นการยิกเวั้น ย่ในหมู่พวก มีนังกาโบ ในดอนสุมาตธาก้ำตาเวันติก ต๊อย่าง, ย่บ่อนนั้น พวกคอบคัวถานะสูวๆ มักมีห่าอรุง หมิ่นปะ หมาดการนสึกสาสะไหมใหม่ และอรุกวานลาขะการน ขะนะที่พวกเด็กน้อยผู้ทุกยาก จำนอน หลอวหลาย กำได้ตั้งต้นชิวิดใหม่ของพวกเอ๊าแบบนี้. ในขุมหิดสะอัดต้นๆ ของสะตะอัดทิขาว ย่ห่อทุกแห่ว ยิกเวั้น ฟิลิบปิน วรุกวานการขะหยายการนบำลิ การนผิน ละเธือน แม่นเส้นหาว สำคับกว่าหมู่เส้นดรอ ที่จะยิก ถานะหาวสังคิมให้สูวขึ้นได้. แต่ละคอบคัว ต่าวกำพะยายาม สุดชิด เพื่อหาเวินสิ่วเสิมการนสึกสาของลูกชาย เพื่อให้เอ๊าได้เป็น พะนักวานป่าไม้ หลื พะนัก วานไปสะนิ.

อาดเป็นคอามผิดย่างหนึ่ว ที่เบิ่วปาภิดการนั้นว่า เป็นพรุงคอามมักใหย่ไฝ่สูวในหาว สังคิม, โธวธรุนเฝิกอ๊บธ๊มง้ำลาขะการนของลัดถะบาน และตำแหน่วงลาขะการนผินละเธือน กำลังบานเธื่อ, แต่กำบ่มิหยังบังคับคินอาชิตาเวันออกสรุวใต้ ให้เอ๊าโธวธรุน. ในคอามจิวแล้อ กำหากมิ หลักถาน หลายอันหลายแนอ จาการสอนต่าวๆในอ๋วงเขด ในละยะหักล้รุอของ สะตะอัดนั้น ที่สะแดวเถิวการนต่ำต้านอันเข้มแขวงจากคอบคัว ต่เส้นหาวเดินนี้. การนติ้ต้านคืน อันหนึ่ว แม่นมาจากคอามเข้มแขวงหาวอัดทะนะทำ และแน่นอนอา ในนั้นแม่นคอามก้าหาน อันทำมะดา ของชาวอาชิตาเวันออกสรุวใต้จำนอนหลาย ในต้นสะตะอัดทิขาว ผู้ต้องการน ผักทะนาชิวิดคอามเป็นยู่ของต๋น ให้ได้ตามมาดถานการนมิอาชิบเป็นง้ำลาขะการนผินละเธือน สะไหมใหม่ และยอมธับเอ๊าอาคานสะถานที่ ของละบับลาขะการนสะไหมใหม่ของลัดถะบาน อันแปกปะหลาดหลาย สำลับอัดทะนะทำการนเมื่องของพวกเอ๊า ให้มาเป็นของต๋น. พวกนัก ชาดนิยมต้องได้ตำนิติธรุนวรุกวานของลัดถะบานอานานิคิมย่างห่วงหันและแน่นอนพ่สิมคอบ ในนามการนธอมมื แต่พวกเอ๊าเองกำได้ปะติเสดโคงส้างหาวการนเมื่องตามปะเผนิคืกัน เพื่อหัน มาธับเอ๊าแนอคึดหลักอันใหม่ กรุอกับการนเป็นลัด.

ผินธับสามย่าง ที่แผ่กว้างของขะบอนการน นั้น ธรุกร้องให้ตั้งข้สังเกดเป็นพิเสด. อัน ทิหนึ่ว, เกือบห่อทุกแห่ว ในอาชิตาเวันออกสรุวใต้ พายหลังปี 1900 อาชิบง้ำลาขะการนผิน ละเธือน ได้กายเป็นสิ่งไฝ่ปองยอดนิยิม ของ "ชินชั้นกาวใหม่". ในเส้นหาวนี้, แนอคึดหลักอัน ยั่งธากเลิกและฝังแหน้นของละบับจัดแบ่งชั้นหาวสังคิม พ้อมทังสะถานะผาบ กำนิดหน้า วรุกตามคอามห่าวไภหรุบถาน จากสูนกาวอำนาดการนเมื่อว กำได้ถืกแปออกเป็นคำสับสะไหม ใหม่ และสิบต่นำใช้มาเลื้อยๆ. คอามไฝ่ปองแนอนี้ พ้อมด้อยผินกรุอเมื่องหาวการนเมื่องย่าว กว้างขอาวของมัน ก่ตัวเป็นเอกะลักอันโดดเด่นหนึ่ว ของสังคิมชาวอาชิตาเวันออกสรุวใต้ ในทุกอันนี้.

ຜົນຮັບອັນທີສອງ, ມີຄວາມຫມາຍສຳຄັນໃນທາງການເມືອງຢ່າງກະທັນຫັນ ຫລາຍກວ່າ. ມາ ເຖິງປີ 1940 ຄວາມແປກຕ່າງດ້ານວັດທະນະທຳ ຢູ່ໃນລຳດັບຊັ້ນການປົກຄອງຂອງລັດຖະບານ ໄດ້ຄ່ອຍ ຫລຸດຜ່ອນລົງ ບໍ່ຫລາຍກໍຫນ້ອຍ. ບັດນີ້ ນັບແຕ່ທ່ານເຈົ້າແຂວງໃຫຍ່ ລົງໄປຮອດ ລະດັບສູງກວ່າບ້ານ ຂັ້ນຫນຶ່ງ, ຢູ່ໃນອາຊີຕາເວັນອອກສຽງໃຕ້ເກືອບທຸກແຫ່ງ ຖືກປົກຄອງ ໂດຍຊົນຊັ້ນນຳ ທັງທີ່ເປັນຄົນເອີລົບ ແລະຄົນອາຊີຕາເວັນອອກສຽງໃຕ້ ໂດຍແບ່ງກັນກິນຕຳແຫນ່ງ ປະຕິບັດຫນ້າວຽກ ຂອງລັດອັນດຽວກັນ, ຊົມໃຊ້ພາສາຫລັກພາສາດຽວກັນ (ຫລື ຢ່າງດຽວ) ສຳລັບວຽກການບໍລິຫານ, ແລະຮັກສາຮູບແບບ ການດຳລົງຊີວິດຄ້າຍຄຽງກັນ. ຢ່າງໃດກໍດີ, ອັນແຕກຕ່າງກັນຢ່າງສິ້ນເຊີງ ກໍຍັງມີຢູ່ ຄື ຂໍ້ຕ່ໍລະບົບຊ້ຳລາ ຊະການ ຍັງຄົງຮັກສາ ລັກສະນະທາງເຊື້ອຊາດຂອງຕົນໄວ້: ຊາວເອີລົບ ຢູ່ສູງ ຊາວອາຊີຕາເວັນອອກ ສຽງໃຕ້ ຢູ່ລຸ່ມ. ຄວາມຊາບຊຶມຮູ້ເຫັນໃນ ຄວາມແຕກຕ່າງອັນນີ້ ໄດ້ມີສ່ວນ ເພື່ອປຸກລຸກຂະບວນການຊາດ ນິຍົມຫລາຍ.

ຜົນຮັບອັນທີສາມ ເຊື່ອງຊ້ອນຄວາມເຍາະເຍີ້ຍໄວ້ຢ່າງເລິກເຊິ່ງ. ຂະບວນການທີ່ບັນຍາຍໄວ້ເທິງ ນັ້ນ ມີທ່າອຽງຢ່າງຫລີກບໍ່ເວັ້ນວ່າ ຈະດຶງດູດເອົາຊ້ຳລາຊະການພົນລະເຮືອນ ຜູ້ໄດ້ຮັບການສຶກສາແບບ ທັນສະໄຫມ ອອກຫ່າງຈາກການດຳລົງຊີວິດແບບຊາວນາ. ຂໍ້ຕ່ໍທາງວັດທະນະທຳແນວໃຫມ່ ໄດ້ປາກົດ ຕົວຂຶ້ນ, ເບິ່ງໃນແງ່ຫນຶ່ງ ມັນໄດ້ແຜ່ລາມກວ້າງອອກເທົ່າໆກັບອັນເກົ່າແກ່ອັນຫນຶ່ງ ແຕ່ວ່າ ບັດນີ້ ມັນເກີດ ຂຶ້ນລະຫວ່າງຄົນທຳມະດາສາມັນ ກັບຊົນຊັ້ນຊ້ຳລາຊະການຊາວອາຊີຕາເວັນອອກສຽງໃຕ້ ພ້ອມກັບຄົນ ເອີລົບ ເຊິ່ງເປັນຜູ້ຢູ່ເຫນືອຫົວພວກເຂົາເອງ. ຜົນຮັບຈາກຄວາມແຕກຕ່າງທາງວັດທະນະທຳນີ້ ຍັງຄົງ ເປັນປັດໄຈສຳຄັນ ຢູ່ໃນປະຫວັດສາດທາງສັງຄົມຂອງອາຊີຕາເວັນອອກສຽງໃຕ້ ສືບຕ່ໍມາ. ໃນເວລາດຽວ ກັນການປົກຄອງອານານິຄົມແບບສັກດິນາ ທີ່ໄດ້ກ່ໍມາແຕ່ກ່ອນຫນ້ານັ້ນ ໄດ້ຂະຫຍາຍຕົວອອກໄປ ນັບມື້ນັບ ເລິກເຊິ່ງຂຶ້ນ. ຮອດວຽກງານ ຄຸ້ມຄອງພົນລະເມືອງໃນຊົນນະບົດຂອງອາຊີຕາເວັນອອກສຽງໃຕ້ ພະແນກ ບໍລິຫານທົ່ວໄປ ທີ່ຂະຫຍາຍອອກເມື່ອທ້າຍສະຕະວັດທີສິບເກົ້າ ສ່ວນຫລາຍຍັງຈຳກັດຂອບເຂດ ຢູ່ກັບແຕ່ ວຽກງານອັນພື້ນຖານຂອງລັດ ເຊັ່ນ ການຮັກສາລະບຽບຮຽບຮ້ອຍ, ດູແລການປະຕິບັດກົດຫມາຍ ແລະ ການເກັບພາສີ. ໃນນີ້ ເຖິງວ່າມີຄວາມແຕກຕ່າງກັນຢ່າງເຫັນໄດ້ຄັກ ໃນຈຸດອື່ນໆ ແນ່ນອນວ່າ ກໍຍັງຄ້າຍ ຄືກັບການບໍລິຫານຂອງລັດຖະບານຮຸ່ນເກົ່າໆ ເຊັ່ນວ່າ ໄດ້ສັບຊ້ອນເອົາເຈົ້ານາຍເຈົ້າເຫລົ່ານຳທ້ອງຖິ່ນ ຜູ້ບໍ່ ໄດ້ປ່ຽນແປງຫຍັງຫລາຍເທົ່າໃດເຂົ້າຮ່ວມ ເຊິ່ງໃນສາຍຕາຊາວນາແລ້ວ ກໍບໍ່ແມ່ນຫຍັງ ນອກເຫນືອຈາກ ການຕັ້ງລາຊະວົງໃຫມ່ ລາຊະວົງຫນຶ່ງ.

ຢ່າງໃດກໍຕາມ ການຂະຫຍາຍວຽກງານຂອງລັດຖະບານອອກໄປຢ່າງວ່ອງໄວ ພາຍຫລັງປີ 1900 ກໍໄດ້ບ່ົງບອກ ເຖິງສາຍສຳພັນແບບໃຫມ່ຮ່ວມ ລະຫວ່າງລັດ ກັບປະຊາຊົນ. ຂໍ້ນີ້ ເປັນຄວາມຈິງແທ້ ສຳລັບຜະແນກການພິເສດ ໂດຍມີຂໍ້ຍົກເວັ້ນແຕ່ເລັກນ້ອຍ, ໄດ້ມີການສ້າງຕັ້ງຜະແນກເຫລົ່ານີ້ຂຶ້ນ ໂດຍສະ ເພາະເຈາະຈົງສຳລັບປະຕິບັດຫນ້າວຽກເຊິ່ງບໍ່ມີມາກ່ອນໃນທ້ອງຖິ່ນ. ໂດຍແຕກຕ່າງກັບຜະແນກບໍລິຫານ ທົ່ວໄປສະໄຫມກ່ອນ ຜະແຫນກເຫລົ່ານີ້ ເກືອບບໍ່ໄດ້ສັບຊ້ອນເອົາຊົນຊັ້ນນຳທ້ອງຖິ່ນ ເຂ້ົາມາໄວ້ໃນຖັນ ແຖວຂອງມັນເລີຍ, ນັບແຕ່ທຳອິດໆພຸ້ນແລ້ວ, ພະນັກງານຂອງຜະແຫນກ ລ້ວນແຕ່ແມ່ນຜູ້ຊາຍ ທີ່ໄດ້ຮັບ ການສຶກສາແນວໃຫມ່ ທັງເອີຣົບ ແລະຊາວອາຊີຕາເວັນອອກສຽງໃຕ້ ແລະອັນດັ່ນສຸດ ແມ່ນມີຄົນ ອິນເດຽ, ຄົນຈີນ ແລະຄົນຕ່າງຖິ່ນ ຊາວອາຊີຕາເວັນອອກສຽງໃຕ້ ເປັນອັດຕາສ່ວນສູງ. ໂດຍເກີດຈາກ ຄວາມຕ້ອງການຂອງຊາວເອີຣົບ ແລະຜົນປະໂຫຍດທາງເສດຖະກິດອື່ນໆ ສຳລັບເຄື່ອງອຳນວຍຄວາມ ສະດວກຕ່າງໆ ແລະກໍຍັງເກີດຈາກລັດທິປິຕານິຍົມ (ຖືສຳຄັນສາຍພ່ໍ) ນຳອີກ ທີ່ເຖິງວ່າມີຄວາມສັບສົນ ໃນການໃຫ້ບໍລິການເລື່ອງສະຫວັດດິການສາທາລະນະ, ບັນດາຜະແຫນກການພິເສດ ກໍຫາກສ້າງຕັ້ງຂຶ້ນ ເພື່ອປ່ຽນແປງກະໂຕຫາດແທ້ ຂອງ ພວກເຂົານັ້ນເອງ.

ເລື່ອງທຳນອງດຽວກັນ ເກີດເປັນຈິງນັບມື້ນັບຫລາຍຂຶ້ນ ຢູ່ໃນຜະແຫນກບໍລິຫານທົ່ວໄປອື່ນໆ. ໃນ ຂະນະທີ່ພວກເຂົາ (ຄົນຈີນ ,ອິນເດຽ...) ສືບຕ່ໍດຳເນີນຫນ້າທີ່ອັນພື້ນຖານຂອງລັດຖະບານ ມາເຖິງສະຕະ

ວັດທີຊາວ ພວກເຂົາຍັງໄດ້ແຊກຊຶມກ່ຽວຂ້ອງ ນຳຢ່າງເລິກເຊິ່ງ ຢູ່ໃນແຜນການປ່ຽນແປງນຳອີກ, ຢ່າງ ຫນ້ອຍສຸດ ກໍຢູ່ໃນການປະສານງານກິດຈະກຳຂອງຜະແຫນກພິເສດຂັ້ນທ້ອງຖິ່ນ ແລະຢູ່ໃນການບັງຄັບໃຊ້ ນະໂຍບາຍດັ່ງກ່າວ. ຍິ່ງໄປກວ່ານັ້ນ ອິດທິພົນຂອງພວກເຂົາ ຕໍ່ການປ່ຽນແປງ ກໍຍັງທະວີແຮງຂຶ້ນ ຢ່າງ ຫລວງຫລາຍ ໂດຍການສັບຊ້ອນພະນັກງານຝ່າຍບໍລິຫານຫົວເກົ່າ ທີ່ເປັນຊາວອາຊີຕາເວັນອອກສຽງ ໃຕ້ອອກ ແລ້ວທົດແທນໂດຍຜູ້ຊາຍທີ່ມີສຶກສາທັນສະໄຫມຮຸ່ນໃຫມ່ ເຊິ່ງກໍຫອມແຜງແນວຄຶດຄືກັນຫລາຍໆ ອັນ ກ່ຽວກັບຄວາມກ້າວຫນ້າ ເທົ່າໆກັບຄົນເອີຣົບ.

ໃນຂະນະທີ່ແຜນວຽກຂອງລັດຖະບານໃຫມ່ເຫລົ່ານັ້ນ ບາງອັນບໍ່ໄດ້ມີຫຍັງກ່ຽວຂ້ອງກັບມະຫາຊົນ ຄົນທົ່ວໄປເລີຍ (ເຊັ່ນ ຜະແຫນກທໍລະນີວິທະຍາ) ຫລື ທີ່ກະທົບເທືອນເຖິງພວກເຂົາ ກໍໂດຍທາງອ້ອມ ເທົ່ານັ້ນ (ເຊັ່ນ ຜະແຫນກໄປສະນີ ໂທລະເລກ ແລະໂທລະສັບ, ທາງລົດໄຟ, ການສຳຫລວດສຳມະໂນຄົວ), ມີແຜນວຽກຫລາຍອັນ ເລັ່ງແລໃສ່ໂດຍສະເພາະການປັບປຸງ ຊີວິດການເປັນຢູ່ຂອງຊາວບ້ານ ເຊັ່ນແຜນ ວຽກ ກ່ຽວກັບສາທາລະນະສຸກ, ປ່າສະຫງວນ ເພື່ອປ້ອງກັນການເຊາະເຈື່ອນ, ໂຮງຮຽນປະຈຳບ້ານ, ຜະແຫນກສິນເຊື່ອ ຊົນນະບົດ, ສະຫະກອນ, ຜະແຫນກສົ່ງເສີມກະສິກຳ, ການຈັດຕັ້ງຄົນໃຫມ່ ໂຄງສ້າງ ຂອບ້ານ. ເບິ່ງຄືວ່າ ບັນຊີ ຖືກຄາດຄະເນເອົາ ແລະກໍເປັນດັ່ງນັ້ນ ສຳລັບພະນັກງານຂັ້ນເມືອງຜູ້ຫົວໄວ ຊາວເອີຣົບ ຫລື ຄູສອນຊາວອາຊີຕາເວັນອອກສຽງໃຕ້ ເຊິ່ງ ເປັນຜູ້ນຳເອົາມາດຕະການຕ່າງໆ ເຂົ້າມາ ໃຊ້ໃນຂັ້ນບ້ານ ອັນນີ້ໂດຍບໍ່ຢາກເວົ້າວ່າຍັດຢູ່ໃຫ້. ແຕ່ຊາວນາເອງ ເກືອບວ່າບໍ່ໄດ້ຮ່ວມໃນການຕີລາຄາ ແລະກຳນົດເປົ້າຫມາຍ ແຫ່ງບັນດາຕົວແທນຄວາມກ້າວຫນ້າທີ່ພວກເຂົາກຳນົດຂຶ້ນເອງນີ້ຊ້ຳ ແລະພວກ ເຂົາກໍຕັດສິນແຜນວຽກໃຫມ່ ໂດຍອີງຕາມມາດຖານການທົດສອບແບບຄັກແນ່ແລ້ວຂອງພວກເຂົາເອງ ໃນ ເລື່ອງປະສິດທິພາບ ແລະຈຸດຫມາຍ. ມີແຜນວຽກຫນ້ອຍອັນ ເຊັ່ນ ການພະຍາບານ ສາທາລະນະສຸກ ແລະໂຮງຮຽນປະຈຳບ້ານ ຢູ່ໃນບາງຂົງເຂດ ໄດ້ເປັນທີ່ ຮັບຮອງເອົາຢ່າງກວ້າງຂວາງ. ອັນອື່ນໆ ເຊັ່ນ ຜະແຫນກສິນເຊື່ອຊົນນະບົດ ແລະການສົ່ງເສີມກະສິກຳ ກໍໄດ້ຮັບການຮອງຮັບເປັນຢ່າງດີ ຢ່າງຫນ້ອຍ ກໍໂດຍຊົນສ່ວນຫນ້ອຍ ຜູ້ໄດ້ຊົມໃຊ້ແຜນວຽກນັ້ນ. ຕາມຄວາມເປັນຈິງແລ້ວ ແຜນວຽກທັງຫມົດ ຢ່າງ ຫນ້ອຍກໍເປັນທີ່ຍອມຮັບເອົາ ຢູ່ໃນບ້ານທັງຫລາຍເປັນສ່ວນໃຫຍ່. ແຕ່ທັງຫມົດ ກໍຫາກກໍ່ໃຫ້ເກີດຄວາມບໍ່ພໍ ໃຈ ຫລື ການຕໍ່ຕ້ານແບບມິດໆຢູ່ຫລາຍໆຂົງເຂດ ໃນບາງກໍລະນີ ມີສ່ວນສົ່ງເສີມ ໃຫ້ເກີດການເຄື່ອນໄຫວ ກໍ່ກະບົດໂດຍກົງ. ເພື່ອປະຢັດເງິນພວກລັດຖະບານ ມັກໃຫ້ຊາວບ້ານ ເປັນຜູ້ໃຊ້ຈ່າຍໃນເລື່ອງທີ່ຝ່າຍ ລັດຖະບານ ບໍ່ປາດຖະຫນາ. ໂດຍທົ່ວໄປແລ້ວ ການກຳນົດເຂດປ່າສະຫງວນ ບໍ່ເປັນທີ່ຊື່ນຊົມປານໃດ ເພາະວ່າມັນຂັດຂວາງການໄປຫາຟືນ ຂອງພວກຊາວບ້ານ.

ການຄ້າສັດໃຫຍ່ ເພື່ອປ້ອງກັນພະຍາດຕິດແປດ ອາດສ້າງຄວາມສູນເສຍແກ່ບຸກຄົນ ຜູ້ເປັນເຈົ້າ ຂອງສັດ ທີ່ຖືກຄ້າ. ການຈັດສັນໃຫມ່ ຫລື ເຕົ້າໂຮມບ້ານເລັກບ້ານນ້ອຍເຂົ້າກັນ ເພື່ອຄວາມສະດວກໃນ ການບໍລິຫານ ເປັນຕົ້ນຕໍ ໄດ້ທຳລາຍຊຸມຊົນທຳມະຊາດ ຫລື ບັງຄັບໃຫ້ບ້ານເຫລົ່ານັ້ນ ຈຸ້ມຢູ່ນຳກັນເປັນ ຫມວດຫມູ່. ກົດລະບຽບໃຫມ່ກ່ຽວກັບການແຕ່ງຕັ້ງ ແລະເລືອກຫົວຫນ້າ (ພໍ່) ບ້ານ ເຊັ່ນ ການເລືອກຕັ້ງ ເປັນຊຸດໆ ຢູ່ຂັ້ນບ້ານໃນຫວຽດນາມພາກເຫນືອ ເປັນເຫດໃຫ້ຂຸນນາງສ່ວນຫລາຍ ຖອຍຫ່າງອອກຈາກຊີ ວິດສັງຄົມ ນັ້ນກໍມັກກະທົບກະເທືອນໂຄງສ້າງຂອງບ້ານ. ຢູ່ທົ່ວທຸກບ່ອນ ຫນ້າທີ່ວຽກໃຫມ່ ແລະການຄວບ ຄຸມແບບໃກ້ຊິດກວ່າ ມັກມີທ່າອຽງດຶງເອົາໂຕພໍ່ບ້ານ ຫ່າງອອກຈາກຊີວິດຊາວບ້ານ, ເຮັດໃຫ້ພວກເຂົາ (ພໍ່ບ້ານ) ຕົກເປັນຕົວແທນລັດຖະບານ ຂັ້ນຕ່ຳລົງໆ ທັງໃນຖານະເປັນຜູ້ນຳ ແລະສະມາຊິກຊຸມຊົນຕົນເອງ. ແຜນວຽກເພື່ອສະຫວັດດິການຂອງບ້ານ ອັນດີໆ - ໂດຍບໍ່ເວົ້າເຖິງນະໂຍບາຍຕໍ່ມາ ສຳລັບເຫດຜົນອື່ນໆ ມັກຖືກນຳໄປໃຊ້ຢ່າງບໍ່ປານີປານໄສ - ເປັນຕົວຢ່າງການທຳລາຍຮູບແບບການດຳລົງຊີວິດຂອງຊາວບ້ານ ຢ່າງບໍ່ເຄີຍມີມາກ່ອນ.

ຊົນຊັ້ນປົກຄອງຮຸ່ນເກົ່າ ກອບໂກຍເອົາພາສີ ທັງຫມົດໄປ ແລະໃຊ້ແຮງງານບັງຄັບ ເທົ່າທີ່ພວກ ເຂົາສາມາດເຮັດໄດ້ ແລະມີແຕ່ໃນເປິງສິງຄາມເທົ່ານັ້ນ ທີ່ພວກເຂົາພໍຈະແຊກແຊງເຂົ້າໄປໃນກິດຈະການ

ຂອງຊາວບ້ານໄດ້ໂດຍກົງ, ນອກນັ້ນ ພວກເຂົາບໍ່ເຄີຍສາມາດເຮັດ ຫລື ເຖິງວ່າຢາກເຮັດພໍແຮງກໍຕາມ. ລັດຖະບານໂຫ່ເມືອງຂຶ້ນ ໃນສະຕະວັດທີຊາວ ກັບ ລັດຖະບານສະຫຍາມ ທັງສອງ ມີຄວາມສາມາດ ແລະ ຈິງຈັງສຸດຂີດ ທີ່ຈະເຮັດແບບນັ້ນ ແລ້ວພວກເຂົາກໍຊັກດຶງເອົາພວກຊາວນາ ທັງທີ່ບໍ່ເຕັມໃຈຈັກໜ້ອຍ ເຂົ້າໄປສູ່ໂຄງຮ່າງໜ້າວຽກໃໝ່ ທີ່ພວກເຂົາຖືກຊັກດຶງໃຫ້ສ້າງມັນຂຶ້ນມາ.

## ໂຄງສ້າງເສດຖະກິດ

ການປ່ຽນແປງຈຳນວນໜ້ອຍໜຶ່ງ ຢູ່ໃນກົງຈັກເສດຖະກິດ ຂອງຂົງເຂດ ຢູ່ໃນລະຫວ່າງ ສາມສ່ວນສີ່ຂອງສະຕະວັດ ກ່ອນປີ 1941 ເປັນສິ່ງປະຈັກແຈ້ງຍິ່ງກວ່າ ການປ່ຽນແປງໃນເລື່ອງການຂົນສົ່ງ. ຢູ່ໃນຂົງເຂດແຄມດິນຂອງອາຊີຕາເວັນອອກສຽງໃຕ້ ການຂົນສົ່ງເຄີຍຊັກຊ້າເລື້ອຍໆ ທັງແພງ ແລະໜຽງຍາກ. ພວກຈັກກະພັດ ທາງຮອນ ກໍ່ສ້າງຖະໜົນສາຍ ແມນດາຣິນ ຈາກ ຣາໂນຍ ໄປ ໄຊ່ງອນ ແຕ່ ພວກເພິ່ນສ້າງແລ້ວ ນຳໃຊ້ມັນສ່ວນໃຫຍ່ ກໍແຕ່ເພື່ອຄົມມະນາຄົມດ້ານການເມືອງ; ຈຳພວກສິນຄ້າ ເຊັ່ນ ພາສີເຂົ້າ ທີ່ສົ່ງໄປຍັງລາຊະສຳນັກ ຢູ່ເມືອງເໜ້ ນັ້ນ ຖືກສົ່ງໄປທາງທະເລ. ຕ້ອງໃຊ້ ເວລາສາມເດືອນ ໂດຍທາງເຮືອ ເພື່ອຂຶ້ນໄປແຕ່ ມັນດາເລ ຫາ ຢ່າງກຸ້ງ, ໜຶ່ງເດືອນເຄິ່ງທາງກຽວນງົວ ແຕ່ໜອງຄາຍ ທີ່ຢູ່ແຄມນ້ຳຂອງ ໄປເຖິງບາງກອກ, ຫລາຍອາທິດ ເພື່ອໄປແຕ່ ເຊມາຣັງ ຫາ ຊຸຣາກາຕາ. ຄວາມໜຽງຍາກ ຂອງວຽກງານການຂົນສົ່ງ ໃນກະໂຕມັນເອງ ກໍເປັນສິ່ງຈຳກັດຂອບເຂດຕໍ່ການຄຸ້ມຄອງ ຢູ່ໃນວົງຂອບເຂດອິດທິພົນທີ່ຢູ່ຫ່າງໄກຈາກເມືອງຫລວງ ແລະຈຳກັດການຄ້າທາງບົກນຳ. ການເຄື່ອນໄຫວໄປມາຕາມຊາຍຝັ່ງທະເລ ແລະໂດຍສະເພາະ ໃນທົ່ວດອນອາຊີຕາເວັນອອກສຽງໃຕ້ ມີຂໍ້ສະດວກກວ່າ ຫລາຍ ແລະການຄ້າຂາຍກໍມີບົດບາດທາງ ເສດຖະກິດທີ່ສຳຄັນກວ່າຫລາຍໃນຂົງເຂດນັ້ນ. ແຕ່ຢູ່ໃນຍຸກຂອງ ເປຣາຫູ ກອງ ເຮືອສະເພົາ ແລະເຮືອໃບລົມ ຂອງເອີຣົບ, ການເດີນເຮືອທາງທະເລທີ່ດົນນານ ແລະການ ຕັ້ງນິຄົມ ອັນກະຈັດກະຈາຍຕາມຊາຍຝັ່ງ ຂອງຫມູ່ເກາະດອນ ກໍບີບບັງຄັບໃຫ້ເກີດຫົວໜ່ວຍການເມືອງ (ລັດ) ແຫ່ງການປາບປາມ ແລະຍຶດຄອງ ຫລາຍກວ່າການປົກຄອງ ໂດຍກົງ ແລະກອງເຮືອແບບນັ້ນ ກໍມີສະມັດຖະພາບຈຳກັດ ສຳລັບການຂົນສົ່ງສິນຄ້າຈຳນວນຫລາຍ.

ບໍລິສັດ ອິຣາວະດີ ຟລໍຕິລລາ (Irrawaddy Flotilla) ກໍ່ຕັ້ງຂຶ້ນໃນຊຸມຕົ້ນປີ 1860 ເປັນບໍລິສັດທີ່ ໃຫ້ບໍລິການ ດ້ວຍເຮືອຈັກອາຍນ້ຳ ລະຫວ່າງເກາະດອນ ບໍລິສັດທຳອິດ ແລະໃຫຍ່ທີ່ສຸດ ໃນອາຊີຕາເວັນອອກສຽງໃຕ້. ມາຮອດທ້າຍສຸດຂອງສະຕະວັດ ບໍລິສັດດັ່ງກ່າວ ກໍຄອບຄອງການສັນຈອນທາງນ້ຳ ລະຫວ່າງຫມູ່ເກາະດອນ ພ້ອມທັງມີກອງເຮືອໃຫຍ່ທີ່ສຸດ, ມີອູ່ສ້ອມແປງເຮືອ, ສາງສິນຄ້າ ໂຮງສີເຂົ້າ ແລະໂຮງເລື່ອຍ. ບໍລິສັດໄດ້ຂົນສົ່ງແຮງງານອົບພະຍົບ ລະຫວ່າງພະມ້າພາກກາງ ຫາຊາຍແດນເຂດອູ່ເຂົ້າປາກແມ່ນ້ຳ ແລະເຂົ້າເປືອກເປັນຮ້ອຍໆພັນໂຕນ ໄປຫາໂຮງສີ ຢູ່ ຢ່າງກຸ້ງ ແລະ ບາຊຽງ(Basein) ກອງເຮືອ ເອື້ອອຳນວຍໃຫ້ກອງທະຫານອັງກິດ ເດີນທາງທວນນ້ຳຂຶ້ນໄປ ໃນເວລາບໍ່ເທົ່າໃດມື້ ເພື່ອໂຄ່ນລົ້ມອານາຈັກ ຂອງພະເຈົ້າທິບໍ ໃນປີ 1885 . ເຮືອຈັກອາຍນ້ຳ ແລະເຮືອພາຍ ໄດ້ ສະແດງບົດບາດສຳຄັນ ແຕ່ໜ້ອຍກວ່າໃນແມ່ນ້ຳອື່ນ ເຊັ່ນໃນແມ່ນ້ຳເຈົ້າພະຍາ ແມ່ນ້ຳຂອງກ້ຳໃຕ້ ແລະແມ່ນ້ຳໄຊໂລ ແຕ່ແມ່ນ້ຳອິຣະວະດີ ເຊິ່ງສາມາດແລ່ນເຮືອໄດ້ ແຕ່ ບາໂມ ຫາທະເລ ເຄີຍເປັນເສັ້ນທາງນ້ຳສຳຄັນກວ່າໜູ່ໃນຂົງເຂດນັ້ນ ທີ່ຜ່ານເລິກເຂົ້າໃນແຜ່ນດິນ ແລະກໍຍັງຄົງຕຳແໜ່ງຢູ່ແບບນັ້ນ ຕະຫລອດຍຸກສະໄໝ ຂອງເຮືອຈັກອາຍນ້ຳ. ຢູ່ບ່ອນອື່ນ ເຊັ່ນເທິງແຜ່ນດິນໃຫຍ່ ແມ່ນທາງລົດໄຟທີ່ໄຂສາກແຫ່ງການປະຕິວັດການຂົນສົ່ງ. ເສັ້ນທາງກະດູກສັນຫລັງຂອງລະບົບຄົມມະນາຄົມ ຂອງພະມ້າ ແລ່ນຜ່ານເຂດທົ່ງຣາບ ສິດທັງ (Sittang) ແຕ່ ຢ່າງກຸ້ງ ເຖິງ ຕອງອູ ໃນປີ 1885, ເຖິງ ມັນດາເລ ປີ 1889 ແລະ ເມືອງລາຊິໂອ ເຂດພູດອຍລັດສານ

ໃນປີ1902, ຂະນະທີ່ສາຍແຍກສຸດທ້າຍຕິດຕໍ່ລະຫວ່າງ ມັນດາເລ ກັບ ມະຍິກະຍິນາ(Myitkyina) ມາກ້ຳ ເໜືອສຸດ. ສາຍທາງຢ່າງກຸ້ງ - ໂພຣເມ ໄດ້ຂະຫຍາຍພື້ນທີ່ອັນກວ້າງໃຫຍ່ ສຳລັບການສົ່ງອອກເຂົ້າປູກ ໃນປີ 1877 ເຊັ່ນດຽວກັນກັບທີ່ສາຍທາງຫນຶ່ງອີກ ທີ່ສ້າງລຸນ ລະຫວ່າງ ບາຊຽງ ແລະມູລະມຽນ (Moulmien). ມາເຖິງຊຸມປີ 1920 ພະມ້າ ມີຕາບ່າງ ເສັ້ນທາງລົດໄຟ ທັງຫມົດ ສອງພັນໄມ ໂດຍບໍ່ມີ ສາຍຕິດຕໍ່ກັບພາຍນອກ ອັນເປັນສິ່ງກຳນົດ ຂົງເຂດເສດຖະກິດຫນຶ່ງ ທີ່ແປກຕ່າງ ຕາມຮູບແບບຂອງຕົນ. ຂົງເຂດອື່ນ ທີ່ຊີວິດເສດຖະກິດ ຖືກກະທົບກະທືອນຢ່າງຮຸນແຮງ ຍ້ອນລະບົບທາງລົດໄຟ ມີຄື ຊະວາ ເຊິ່ງ ມີພື້ນທີ່ຫລຸບໆໂນນໆເປັນພິເສດ ທັງປະຊາກອນ ກໍຫນາແໜ້ນ ແລະດອນລູຊອນ ທີ່ມີເສັ້ນທາງລົດໄຟ ຜ່ານ ແຕ່ມະນີລາດ້ານເໜືອ ຜ່ານໄປສູ່ທົ່ງພຽງພາກກາງ ໄດ້ຂະຫຍາຍພື້ນທີ່ອຸດົມສົມບູນ ສຳລັບການ ປູກເຂົ້າ ແລະສະເພາະການຜະຫລິດນ້ຳຕານ ໃນຍຸກສະຕະວັດທີຊາວ.

ເຖິງຢ່າງໃດກໍດີ ເສັ້ນທາງລົດໄຟ ຢູ່ສະຫຍາມ ນັບວ່າມີລັກສະນະຕັດສິນກວ່າຫມູ່. ລັດຖະບານ ສະຫຍາມ ຊຶ່ງຖືກຫນີບ ຢູ່ລະຫວ່າງປະເທດໃກ້ຄຽງ ທີ່ເປັນຫົວເມືອງຂຶ້ນອັນຕະລາຍ ໄດ້ຖືສຳຄັນເລື່ອງ ການເມືອງ ກອນສິ່ງໃດຫມົດ ເພື່ອມາກຳນົດນະໂຍບາຍການປົກຄອງຂອງຕົນ. ລັດຖະບານໄດ້ມອບຫມາຍ ໃຫ້ຄົນເຢຽລະມັນ ຮັບພາລະບົດບາດສຳຄັນ ຢູ່ໃນກົມທາງລົດໄຟ ເພາະວ່າ ປະເທດເຢຽລະມັນ ບໍ່ໄດ້ຮຸກ ຮານສະຫຍາມ. ດ້ວຍຈິດສຳນຶກ ແບບເອົາຕົວລອດຕະຫລອດການ ແຫ່ງລັດທິຣິດເດີມນິຍົມ ໃນເລື່ອງພາສີ ອາກອນ ແລະກຸ້ມຕົນເອງດ້ານການເງິນ ສະຫຍາມໄດ້ ໃຊ້ຈ່າຍເງິນຕົນເອງສຳລັບໂຄງການທາງລົດໄຟ ຊຸ ດຕົ້ນໆ ດ້ວຍເງິນລາຍຮັບທີ່ມີຢູ່ ແທນການກູ້ຢືມຕ່າງປະເທດ. ຫນຶ່ງໃນສາມ ຂອງເສັ້ນທາງທຳອິດ ເລີ່ມກໍ່ສ້າງໃນປີ 1892 ແລະໄປຮອດໂຄຣາດ ໃນປີ 1900 ແນໃສ່ ເພື່ອຕ່ຕ້ານການຮຸກຮານຂອງຝຣັ່ງ ຜ່ານ ມາທາງປະເທດລາວ.

ຈາກ ໂຄຣາດ (ນະຄອນຣາຊະສີມາ) ເສັ້ນທາງ ຂະຫຍາຍອອກໄປທາງແມ່ນ້ຳຂອງ ໃນຊຸມປີ 1920 ແລະ 1930, ດ້ານເໜືອ ໄປເຖິງ ອຸດອນ ແລະຫນອງຄາຍ ເຊິ່ງກັບວຽງຈັນ ແລະທາງຕາເວັນ ອອກ ເຖິງ ອຸບົນ. ໃນປີ 1909, ເສັ້ນທາງສຳຄັນທີສອງ ສ້າງຂຶ້ນມຸ່ງສູ່ພາກເໜືອ ເຖິງ ອຸດຕຣະດິດ ລຽບ ໄປຕາມຕີນພູ ແລະຢຸດໄປຊົ່ວຄາວ ກອນຈະສ້າງຕໍ່ໄປຮອດຊຽງໃຫມ ໃນປີ 1921. ເສັ້ນທາງທີສາມ ເລີ່ມ ສ້າງໃນປີ 1909 ໂດຍການກູ້ຢືມເງິນຈາກອັງກິດ ຕິດຕາມດ້ວຍການ ແບ່ງແຍກລັດມາເລ ຄັ້ງສຸດ ທ້າຍ ລະຫວ່າງ ສະຫຍາມ ແລະອັງກິດ, ທາງສາຍນີ້ ເຊື່ອມຕໍ່ ບາງກອກ ຫາ ປີນັງ ໃນປີ 1922. ຜົນກະ ທົບທາງເສດຖະກິດ ຂອງເສັ້ນທາງລົດໄຟ ໃນສະຫຍາມ ເປັນຫນ້າຈັບໃຈ, ເສັ້ນທາງສາຍເໜືອ ແລະ ພາກຕາເວັນອອກສຽງເໜືອ ອຳນວຍໃຫ້ສົ່ງອອກເຂົ້າ ຈາກພາກພື້ນນັ້ນ ໄດ້ເປັນຈຳນວນຫລວງຫລາຍ ເປັນເທື່ອທຳອິດ. ຊາວຈີນຍົກຍ້າຍໄປຢູ່ບໍລິເວນສຸດສາຍທາງທຸກບ່ອນ ຕາບ່າງທາງລົດໄຟເຂັ້ມແຂງຂຶ້ນ ດ້ວຍທຸລະກິດຂົນສົ່ງສິນຄ້າຂອງພວກເຂົາເອງ. ຜົນກະທົບທາງການເມືອງ ແລະເສດຖະກິດ ກໍມີຄວາມ ຫມາຍຫລາຍຄືກັນ. ມາເຖິງປີ 1930 ຕາບ່າງເສັ້ນທາງລົດໄຟແຫ່ງຊາດ ຍາວ 1,875 ໄມ ມີຈຸດສຸມຢູ່ ບາງກອກ ອັນໄດ້ສົ່ງເສີມຄວາມຍິ່ງໃຫຍ່ ຂອງນະຄອນທີ່ເປັນບ່ອນຕັ້ງຂອງຄະນະລັດຖະບານ. ພາຍຫລັງ ທາງລົດໄຟສາຍຊຽງໃຫມ ສຳເລັດລົງແລ້ວເທົ່ານັ້ນ (ຄວາມຈິງເລື່ອງນີ້ບໍ່ກ່ຽວກັນເລີຍ) ທີ່ ບາງກອກ ເລີ່ມເກັບພາສີຢ່າງຂຸ້ນຂຽວ ທົ່ວທັງພາກເໜືອ ແລະກໍແມ່ນເວລານີ້ເອງ ທີ່ເງິນບາດ ເຂົ້າມາແທນບ່ອນ ເງິນຣູປີ ເຊິ່ງເປັນເງິນຕານິຍົມໃຊ້ກັນມາກ່ອນໃນເຂດນີ້. ເຫດການທຳນອງດຽວກັນ ເກີດຂຶ້ນຢູ່ທາງພາກ ຕາເວັນອອກສຽງເໜືອ ແລະນີ້ກໍເປັນສິ່ງຈະແຈ້ງວ່າ ທາງລົດໄຟມີຄວາມສຳຄັນເປັນພິເສດ ຕໍ່ການເຊື່ອມ ຕໍ່ປະເທດໄທທັນສະໄຫມເຂົ້າກັນ. ໃນເວລາດຽວກັນ ບໍ່ຄືກັບໃນພະມ້າ, ເສັ້ນທາງລົດໄຟໃນສະຫຍາມ ຍັງໄດ້ ອຳນວຍໃຫ້ມີສາຍຕິດຕໍ່ອັນສຳຄັນກັບພາຍນອກນຳອີກ. ສາຍທາງມຸ່ງສູ່ພາກໃຕ້ ໄດ້ມີສ່ວນສະຫນັບສະ ຫນຸນທ່າອຽງອັນຕົ້ນໆ ສຳລັບພາກໃຕ້ຂອງສະຫຍາມ ເພື່ອຫັນເລື່ອງເສດຖະກິດໄປຫາ ປີນັງ; ໃນສະຕະ ວັດທີສິບເກົ້າ ກຳມະກອນເໝືອງແຮ່ກົ່ວ ຊາວຈີນສ່ວນໃຫຍ່ ເດີນທາງມາເຖິງພາກໃຕ້ສະຫຍາມ ໂດຍ ຜ່ານປີນັງ ແລະມາຮອດສະຕະວັດທີຊາວ ແຮ່ກົ່ວຈາກເຂດນີ້ ຖືກຂົນຍ້າຍໄປຫລອມ ຢູ່ (ປີນັງ) ພຸ້ນ - ການ

ຫລຸດລະດັບ ຄວາມຍິ່ງໃຫຍ່ທາງເສດຖະກິດຂອງບາງກອກ ບໍ່ໄດ້ຖືກກະທົບກະເທືອນຢ່າງຈິງຈັງ ຈົນມາ ຮອດຊຸມປີ 1960. ສ່ວນໃນອີກດ້ານຫນຶ່ງ, ສາຍທາງພາກຕາເວັນອອກສຽງເຫນືອທີ່ມຸ່ງຫນ້າສູ່ນ້ຳຂອງ, ກໍບໍ່ໄດ້ມີທາງລົດໄຟຂອງຝຣັ່ງ ໃນລາວ ມາສູ້ຢັນເລີຍ, ອັນນັ້ນກໍກາຍເປັນກຳລັງໃຫ້ແກ ທ່າອຽງຍືນຍາວ ມາແຕ່ດົນ ຂອງລາວແຄມຂອງ ໃຫ້ຫັນຫນ້າມາທາງບາງກອກ.

ໃນທາງກົງກັນຂ້າມ ລະບົບລົດໄຟຂອງຝຣັ່ງ ທີ່ຍິ່ງໃຫຍ່ໃນອິນດູຈີນ ຊ້ຳມາມີຄວາມສຳຄັນ ຢູ່ໃນ ຂອບເຂດຈຳກັດ. ມີທາງສອງສາຍໄປຮອດຈີນ ສະທ້ອນໃຫ້ເຫັນ ຄວາມຝັນເກົ່າແຕ່ສະຕະວັດທີສິບເກົ້າ ໃນເລື່ອງ "ເຈາະຕະຫລາດຈີນ". ເສັ້ນທາງສາຍຕົ້ນຕໍ ຫາກໍສ້າງແລ້ວ ພໍດີກ່ອນເກີດສົງຄາມໂລກ ຄັ້ງທີ ສອງນີ້ເອງ, ລຽບໄປຕາມຝັ່ງທະເລຂອງຖະຫນົນແມນດາຣິນ ແລ້ວກໍເປັນຄືວ່າ ບໍ່ມີຄວາມຫມາຍທາງ ເສດຖະກິດເທົ່າໃດ ເພາະແມ່ນບ່ອນການຂົນສົ່ງ ທາງເຮືອສາມາດດຳເນີນການຢູ່ແລ້ວ. ພວກຝຣັ່ງ ປະສົບ ຄວາມສຳເລັດຫລາຍກວ່າ ໃນເລື່ອງເຮັດຖະຫນົນ, ໂດຍຂະຫຍາຍທາງຜ່ານໃຫມ່ໆເຂົ້າສູ່ເຂດພູດອຍ ແລະ ຕາມແຄມຝັ່ງແມ່ນ້ຳຂອງ ເຖິງວ່າ ຈະບໍ່ທັນພຽງພໍເພື່ອຜ່ານຂ້າມຈອມຜາເຫວຫ້ວຍທຳມະຊາດ ໃນອິນ ດູຈີນ ໄດ້ຫມົດເທື່ອກໍຕາມ. ແມ່ນ ຊະວາ ທີ່ມີລະບົບຖະຫນົນຢ່າງດີກວ່າຫມູ່ ໃນຍຸກນັ້ນຄື ແຕ່ປີ 1850 ພ້ອມໆກັບ ຟິລິປິນ ແລະພະມ້າ ທີ່ລະບົບຖະຫນົນໄດ້ຂະຫຍາຍຕົວຫລາຍ ກ່ອນເກີດສົງຄາມໂລກ ຄັ້ງ ທີສອງ.

ເຮືອຈັກອາຍນ້ຳ ມີບົດບາດໃນການຂົນສົ່ງທາງທະເລ ໃນອາຊີຕາເວັນອອກສຽງໃຕ້ ຫນ້ອຍກວ່າ ທາງລົດໄຟ ແລະເສັ້ນທາງສະໄຫມໃຫມ່ ທີ່ມີລົດໃຊ້ຈັກແລ່ນ ໄປຕາມຫນ້າດິນ ຍ້ອນວ່າ ເສັ້ນທາງ ປະເພດຫລັງສຸດ ເປັນແບບໃຫມ່ອ່ຽມຄືກັນ ສ່ວນວ່າເຮືອຈັກອາຍນ້ຳນັ້ນ ກໍໃຊ້ໄດ້ດີກວ່າ ສຳລັບບາງຢ່າງ ເທົ່ານັ້ນ ສຳລັບຫລາຍໆຈຸດຫມາຍ ແລະເປັນພາຫະນະຂົນສົ່ງ ທີ່ລ້ຳໃຊ້ກັນມາແລ້ວ. ທີ່ແທ້ແລ້ວ ເຮືອໃບ ລົມ ໄດ້ເປັນຜູ້ຄອບຄອງການເດີນທາງຕາມຊາຍຝັ່ງທະເລມາຮອດຊຸມປີ 1890 ແລະສືບຕໍ່ ມີບົດບາດສຳ ຄັນທາງເສດຖະກິດ ຈົນມາຮອດທຸກມື້ນີ້. ອີກຢ່າງຫນຶ່ງ ເສັ້ນທາງແລ່ນເຮືອຈັກອາຍນ້ຳ ກໍບໍ່ໄດ້ມີຜົນກະ ທົບຢ່າງຮອບດ້ານ ໂດຍກົງ ແລະຊົ່ງພະລັງໃດ ຢູ່ເທິງເກາະດອນໃນພາກພື້ນອາຊີຕາເວັນອອກສຽງໃຕ້ ເທົ່າກັບເສັ້ນທາງລົດໄຟໃນສະຫຍາມ ແລະທາງລົດໄຟ ກັບທາງຖະຫນົນໃນພະມ້າ. ຫົວຫນ່ວຍການ ເມືອງທີ່ປາກົດໂຕຂຶ້ນໃຫມ່ ຢູ່ເກາະດອນໃນອາຊີຕາເວັນອອກສຽງໃຕ້ ໄດ້ເຕົ້າໂຮມພື້ນທີ່ອັນກວ້າງຂວາງ ແຫ່ງໂລກການເດີນທາງທາງທະເລ ເຂົ້າກັນຢ່າງຫມັ້ນຄົງ, ເປັນໂລກທີ່ສາມາດເຄື່ອນໄຫວທາງການຄ້າ ໄດ້ຕາມໃຈມັກ ໄປຕາມທະເລອັນກວ້າງໃຫຍ່. ຕະຫລອດລະຍະສະຕະວັດທີສິບເກົ້າ ເຖິງສະຕະວັດທີຊາວ ການຄ້າທົ່ວໄປ ຂອງເຂດທີ່ກາຍມາເປັນ ເນເທີແລນ ອິນດີສ ກັບ ຟິລິປິນກ້ຳໃຕ້ ໄດ້ສຸມໃສ່ ສິງກະໂປ ເຊິ່ງ ນອນຢູ່ໃນຂອບເຂດການເມືອງອີກແບບຫນຶ່ງ.

ເຖິງຢ່າງໃດກໍດີ ການເດີນທາງໂດຍເຮືອຈັກອາຍນ້ຳ ກໍໄດ້ນຳເອົາການປ່ຽນແປງທີ່ສຳຄັນ ມາໃຫ້. ເຮືອຈັກອາຍນ້ຳ ເປັນອາວຸດຍຸໂທປະກອນອັນສຳຄັນ ເພື່ອຍາດເອົາໄຊຊະນະເຫນືອພວກໂຈນເຮືອ ກາງ ທະເລ ໃນເວລານັ້ນ ພໍດີຖືກກາລະໂອກາດເຮັດໃຫ້ພາກພື້ນນັ້ນມີຄວາມປອດໄພ ພົ້ນຈາກການຂູດຮີດທາງ ເສດຖະກິດ ຫລື ການຮຸກຮານ ທາງການເມືອງໃນ ຮູບການອື່ນ. ເສດຖະກິດສົ່ງອອກ ອັນທະວີຄູນຂຶ້ນ ຂອງ ຟິລິບປິນ ໄດ້ຍວກຍູ້ສົ່ງເສີມ ການຂົນສົ່ງສິນຄ້າລະຫວ່າງຫມູ່ເກາະດອນຫລາຍຂຶ້ນ ເຊິ່ງວຽກນີ້ ສ່ວນ ຫລາຍກໍແມ່ນພວກລູກຊອດຈີນ ແມສໂຈ ຄອບຄອງເປັນເຈົ້າ ແລະສິ່ງທີ່ໄດ້ຮັບກໍແມ່ນຄວາມສຳພັນໃກ້ຊິດ ແຫ້ນແຟ້ນ ສະຫມ່ຳສະເຫມີກວ່າເກົ່າລະຫວ່າງຫມູ່ເກາະດອນ ແລະປະຊາຊົນໃນປະເທດນີ້.

ໃນເຂດເນເທີແລນ ອິນດີສ ບໍລິສັດຂົນສົ່ງສິນຄ້າ ຂະຫນາດໃຫຍ່ແຫ່ງດຽວ ຊື່ ເຄ ພີ ເອມ (K P M) ມີ ອຳນາດອິດທິພົນແບບດຽວກັນ ເຖິງແມ່ນຈະຢູ່ພາຍໃຕ້ເງື່ອນໄຂອັນຫຍຸ້ງຍາກກວ່າຫລາຍກໍຕາມ.

ແນ່ນອນວ່າ ເຮືອຈັກອາຍນ້ຳ ບໍ່ຄືກັບທາງລົດໄຟ ແລະທາງຖະຫນົນ ມັນໄດ້ເສີມສົ່ງການຕິດຕໍ່ ກັບໂລກພາຍນອກຂອງອາຊີຕາເວັນອອກສຽງໃຕ້ ໃຫ້ເຂັ້ມແຂງຂຶ້ນນຳ. ໃນລະຍະນີ້ ເສດຖະກິດທ້ອງຖິ່ນ ຂະຫນາດນ້ອຍ ຈຳນວນຫລາຍທີ່ເປັນລັກສະນະສະເພາະຂອງອາຊີຕາເວັນອອກສຽງໃຕ້ ແບບເດີມ ບໍ່ພຽງ

ແຕ່ໄດ້ຜູກພັນຫມັ້ນຫນຽວຕໍ່ກັນຫລາຍຂຶ້ນພາຍໃນໂຄງສ້າງເສດຖະກິດແຫ່ງຊາດໃຫມ່ ເທົ່ານັ້ນ ແຕ່ຍັງ ໄດ້ຖືກຍົກຂຶ້ນໄປສຳຜັດກັບເສດຖະກິດໂລກນຳ. ບໍລິສັດແລ່ນເຮືອຂອງອັງກິດ ສາຍໃຫ້ບໍລິການແກ່ອາຊີຕາ ເວັນອອກສຽງໃຕ້ ໃນຕອນທຳອິດ ສ່ວນໃຫຍ່ແລ່ນຜ່ານ ໄປຕາມເສັ້ນທາງມຸ່ງສູ່ຝັ່ງທະເລຈີນນັ້ນ ປາກົດຕົວ ຂຶ້ນໃນຊຸມປີ 1860. ໃນຊຸມທົດສະວັດຕໍ່ມາ ກໍໄດ້ມີຫລາຍບໍລິສັດແລ່ນເຮືອມາເຂົ້າຮ່ວມ ເຊັ່ນ ຂອງຝຣັ່ງ ດັດຊ໌, ເຢຽລະມັນ ອະເມຣິກາ ຍີ່ປຸ່ນ ແລະ ສາຍອື່ນໆ ໂຮມທັງເຮືອຂົນສົ່ງສິນຄ້າເອກະຊົນ. ບໍລິສັດໃຫຍ່ ສ່ວນຫລາຍ ມັກນຳໃຊ້ທ່າເຮືອຂະຫນາດກວ້າງ ຂອງອາຊີຕາເວັນອອກສຽງໃຕ້ ໃນຖານເປັນສ່ວນຫນຶ່ງ ຂອງເສັ້ນທາງຫລັກຂອງບໍລິສັດ ແຕ່ບາງບໍລິສັດ ກໍໃຫ້ບໍລິການແຕ່ເສັ້ນທາງລະຍະໃກ້ໆ ເຊັ່ນ ແຕ່ ອິນເດຽ ຜ່ານອ່າວ ແບງການ ແລະຈາກຊາຍຝັ່ງທະເລຈີນ ກັບ ຍີ່ປຸ່ນ ໄປສູ່ທ່າເຮືອຂະຫນາດນ້ອຍ ຕາມຊາຍຝັ່ງ ປະເທດອາຊີຕາເວັນ ອອກສຽງໃຕ້.

ການຂົນສົ່ງສິນຄ້າລະຫວ່າງປະເທດ ທະວີຂຶ້ນຢ່າງວ່ອງໄວ ໃນເລື່ອງນ້ຳຫນັກ, ຄວາມຖີ່ຈ້ ຂອງ ຖ້ຽວເຮືອ ແລະຂະຫນາດຂອງການບໍລິການ ມັນອາດກໍ່ໃຫ້ເກີດສາຍສຳພັນອັນພື້ນຖານທີ່ສຸດ ລະຫວ່າງ ອາຊີຕາເວັນອອກສຽງໃຕ້ ກັບເສດຖະກິດໂລກ ແລ້ວກາຍເປັນໂຕແທນຕົ້ນຕໍ ແຫ່ງການປ່ຽນແປງດ້ານ ເສດຖະກິດ ຢູ່ໃນຂົງເຂດນັ້ນ. ເຮືອຈັກອາຍນ້ຳໄດ້ຂົນສົ່ງ ນ້ຳຕານ ແລະເຂົ້າ ອອກໄປເປັນຫລາຍສິບລ້ານ ໂຕນ ແລະນຳເອົາຜ້າແພ, ເຄື່ອງກະປ໋ອງ ແລະເຄື່ອງກົນຈັກຫນັກ ກັບເຂົ້າມາ.

ບໍ່ແມ່ນເຮືອສະເພົາຈີນ ແຕ່ແມ່ນເຮືອຈັກອາຍນ້ຳ ທີ່ນຳເອົາຊາວຈີນອົບພະຍົບ ຈຳນວນນັບມື້ນັບ ຫລາຍຂຶ້ນ ເຂົ້າມາໃນລະຫວ່າງເຄິ່ງສະຕະວັດກ່ອນປີ 1930 ແລະນຳເອົາຊາວອິນເດຽສ່ວນໃຫຍ່ໄປ ພະມ້ຳ ແລະ ມາເລ. ເຮືອຈັກອາຍນ້ຳ ຂົນເອົາທະຫານເອີຣົບ, ພະນັກງານ ອານານິຄົມ ແລະພວກຊາຍຫນຸ່ມ ນັກຝັນ ເຂົ້າມາທຳການປຸກຝັ່ງ ແລະມາຮອດສະຕະວັດທີຊາວ ກໍຂົນເອົາລູກເມຽ ຄອບຄົວຂອງພວກເຂົ້າ ແລະນັກທ່ອງທ່ຽວ ກໍນັບມື້ນັບຫລາຍຂຶ້ນນຳ.

ລະບົບຂົນສົ່ງທັງຫລາຍ ແມ່ນສິ່ງເດັ່ນແຈ້ງກວ່າຫມູ່ ຂອງໂຄງສ້າງເສດຖະກິດໃຫມ່, ຍ້ອນວ່າ ມັນເຕັ້ນແລ່ນໃຫ້ເຫັນຕຳຕາ ໄປຕາມເນີນສູງຄ້ອຍຕ່ຳ, ຍ້ອນວ່າ ມັນຂົນສົ່ງຜູ້ຄົນໂດຍສານ ແລະສິນຄ້າຈຳ ນວນມະຫາສານ ແລະກໍຍ້ອນວ່າ ມັນແນມເຫັນໄດ້ຫລາຍຮູບແລະແບບ ເຊັ່ນວ່າ ແຕ້ມລົງໃສ່ແຜນທີ່ກໍໄດ້. ແຕ່ວ່າກົນໄກເສດຖະກິດປະເພດອື່ນໆ ຫລາຍແບບຫລາຍແນວ ກໍບໍ່ໄດ້ມີຄວາມສຳຄັນຫນ້ອຍກວ່າ ຍ້ອນວ່າ ມັນບໍ່ກະທົບຕໍ່ສາຍຕາ ແລະບໍ່ເບິ່ງເຫັນໃນແຜນທີ່. ອັນທີ່ສຳຄັນບໍ່ຫນ້ອຍ ທັງເປັນເງື່ອນໄຂລະຍະຕົ້ນ ສຳລັບ ຊີວິດ ເສດຖະກິດ ທີ່ມີໂຄງສ້າງ ແລະປະສິດທິພາບສູງກວ່າຫລາຍ ກໍແມ່ນລະບົບເງິນຕາ ຕາມມາດຕະ ຖານ. ໃນສະຫຍາມ ປີ 1850 ຍ້ອຍກໍລະນີສຸດໂຕ່ງ, ຫົວຫນ່ວຍໃຫຍ່ສຸດຂອງລະບົບເງິນເກົ່າ ແມ່ນຊັ່ງ ທີ່ມີ ຄ່າເທົ່າກັບ 20 ຕຳລຶງ ຫລື 80 ບາດ ຫລື 320 ສະຫລຶງ ຫລື 640 ເຟື້ອງ ຫລື 1,280 ຊີກ ຫລື 2,560 ສ້ຽວ ຫລື 5,120 ອັດ ຫລື 10,240 ໂສລົດ ຫລື 510,000 ເບ້ັຽ . ນອກຈາກນີ້ ຍັງມີ ເງິນ ຮູປີ ອິນເດຽ ໃຊ້ ຫມຸນວຽນຢູ່ໃນວົງການການຊື້ຂາຍໄມ້ສັກ ຢູ່ຊຽງໃຫມ່ ກັບເງິນໂດລາ ເມັກຊິກ ແລະອື່ນໆ ທີ່ຫມຸນວຽນ ຢູ່ບ່ອນອື່ນໆ ໂດຍສະເພາະທາງພາກໃຕ້. ເງິນຫລຽນ ກະສາບ ຊຶ່ງໃຊ້ຫມຸນວຽນ ຢູ່ໃນສະໄຫມ ລາຊະການ ທີ່ສີ່ ມີຄ່າເທົ່າກັບ 64 ອັດ ຕໍ່ ຫນຶ່ງບາດ ເຮັດໃຫ້ມີຄວາມສະດວກຂຶ້ນແດ່ ແຕ່ຕ້ອງລໍຖ້າຈົນ ເງິນຫລຽນ ຕ່າງປະເທດ ຖືກນຳເຂົ້າມາໃຊ້ ຢ່າງຖືກຕ້ອງ ຕາມກົດຫມາຍ ໃນປີ 1857 ໃນອັດຕາ 5 ບາດ ຕໍ່ 3 ໂດລາ ເມັກຊິກ ກ່ອນຄວາມຫຍຸ້ງຍາກ ບາງຄັ້ງຄາວ ທີ່ເກີດຂຶ້ນກັບການຄ້າຕ່າງປະເທດ ແລະການ ແລກປ່ຽນ ຈຶ່ງຄ່ອຍໄດ້ຮັບການແກ້ໄຂ

ລະບົບເງິນຕາຫວຽດນາມ ແມ່ນກໍລະນີທີ່ແຕກຕ່າງກັນແດ່ ຄືມີການພັດທະນາຂຶ້ນດີຫລາຍ ເມື່ອ ປຽບໃສ່ລະບົບອື່ນໆ ມັນບໍ່ໄດ້ປ່ຽນແປງ ແຕ່ຫາກຖືກປ່ຽນແທນຫມົດເລີຍ ໂດຍເລີ່ມຕົ້ນຢູ່ ໂກແຊງຊິນ ກ່ອນ ຫມູ ດ້ວຍການນຳເອົາລະບົບເງິນ ຂອງຫົວເມືອງຂຶ້ນຝຣັ່ງແບບໃຫມ່ ຄືເງິນ ປ໊ຽດສເຕີຣ (Piastre) ມາໃຊ້ ເປັນຫົວຫນ່ວຍພື້ນຖານ. ຫົວເມືອງຂຶ້ນພະມ້ຳເອງ ກໍບໍ່ມີລະບົບເງິນຕາຂອງຕົນເອງ ໄດ້ນຳໃຊ້ເງິນຮູປີ ຂອງອິນເດຽແທນ ດັ່ງນັ້ນ ເບິ່ງໃນດ້ານການເງິນ ການເມືອງ ແລະການປົກຄອງ ຈຶ່ງຖືວ່າ ໄດ້ຜະຫນວກ

ເຂົ້າເປັນດິນແດນດຽວກັນ ກັບອານາຈັກອິນເດຽ. ຢູ່ໃນເກາະດອນຂອງອາຊີຕາເວັນອອກສຽງໃຕ້ ເປັນບ່ອນ ທີ່ໄດ້ດຳເນີນທຸລະກິດສ່ວນໃຫຍ່ຂອງຕົນມາຫລາຍສະຕະວັດ ໂດຍອາໄສສະກຸນໂດລາຫລຽນເງິນ ທັງຫມົດ ຕ່າງໆ ນັບເປັນຫລາຍສັດຕະວັດມາແລ້ວ ແມ່ນມີການໃຊ້ສະກຸນຫລຽນເງິນໂດລາ ຄ້າຂາຍກັບຈີນເທົ້າ ຮອດການແບ່ງປັນເຂດແດນທາງການເມືອງສຳເລັດລົງລະຫວ່າງປີ 1910 ແລ້ວນັ້ນ ມີລະບົບເງິນຕາ ເປັນ ຂອງຕົນເອງຄຽງຄູ່ກັນ. ຢູ່ ຟີລິບປິນ ຫລຽນເງິນເປໂຊ ຍັງຄົງຖືກນຳໃຊ້ສືບຕໍ່ມາ ຮອດພາຍຫລັງປີ 1903 ໃນອັດຕາສອງຫລຽນ ຕໍ່ຫນຶ່ງໂດລາ ອະເມລິກາ, ເງິນຫລຽນ ໄດ້ແຜ່ຂະຫຍາຍໄປທົ່ວດິນແດນ ເນເທີ ແລນອິນດີສ ໃໝ່ ຢ່າງວ່ອງໄວ ພາຍຫລັງປີ 1900 ແລະອົງເຂດອັງກິດ ກໍໄດ້ນຳໃຊ້ ທະນະບັດໂດລາ ໃນ ທຳອິດ ໃນປີ 1906 ໃນອັດຕາແລກປ່ຽນ ສອງຊິນລິງ ກັບສີ່ ເພນນີ ຂອງເງິນ ສເຕີລິງ ອັງກິດ.

ການນຳໃຊ້ ແລະການແຜ່ກະຈາຍຂອງລະບົບເງິນຕາ ສະແດງໃຫ້ເຫັນການເຊື່ອມຕໍ່ທາງເສດຖະ ກິດສາມປະເພດ ຄື ການເຊື່ອມຕໍ່ກັບເສດຖະກິດໂລກ ໂດຍທົ່ວໄປ, ການເຊື່ອມຕໍ່ກັບເສດຖະກິດ ຂອງຜູ້ກຳ ອຳນາດໃນເມືອງຕ່າງໆ ແລະຢູ່ໃນທ່າມກາງພາກສ່ວນຕ່າງໆ ຂອງພາຍໃນກະໂຕຫົວເມືອງຂຶ້ນເອງ ຍ້ອນ ວ່າ ການເຄື່ອນໄຫວທາງເສດຖະກິດ ພາຍໃນແຕ່ລະຫົວຫນ່ວຍ "ແຫ່ງຊາດ" ນັບມື້ນັບຖືກສະເຫນີອອກ ໃນຖານະເປັນຜູ່ສື່ກາງຂອງການແລກປ່ຽນຢ່າງດຽວ. ລະບົບອັດຕາລາຄາໃຫມ່ ມີຜົນສະທ້ອນຈຳກັດ ຫລາຍກວ່າ, ຂະນະທີ່ຢູ່ທຸກແຫ່ງ ລະບົບເຫລົ່ານັ້ນໄດ້ກຳນົດຫມາຍຫົວຫນ່ວຍການເມືອງໃຫມ່ ໃນຖານະ ເປັນອົງເຂດເສດຖະກິດຕ່າງຫາກ ຜົນຮັບອັນຊົ່ງອິດທິພົນສູງທີ່ສຸດ ເກີດຂຶ້ນໃນເຂດບ່ອນທີ່ນະໂຍບາຍໂຫ ເມືອງຂຶ້ນ ກຳນົດສາຍສຳພັນດ້ານອັດຕາລາຄາເຂັ້ມງວດ ໃສ່ກັບປະເທດທີ່ມີເມືອງຫລວງໃຫຍ່. ເລື່ອງນີ້ ເປັນຄວາມຈິງ ສຳລັບປະເທດ ຟີລິບປິນ ກັບ ອິນດູຈີນ. ປະເທດຝຣັ່ງ ລ້ອມປ່ຽວອິນດູຈີນ ໄວ້ໃນ ລະບົບອັດຕາລາຄາແບບປົກປ້ອງສູງສຸດ, ດັ່ງນັ້ນ ຈຶ່ງບັງຄັບໃຫ້ຕັດຂາດສາຍສຳພັນອັນໃກ້ຊິດທາງເສດ ຖະກິດ ລະຫວ່າງ ຫວຽດນາມ ກັບ ຈີນ, ເຊັ່ນດຽວກັນກັບທີ່ເຄີຍຕັດຂາດຄວາມຢຳແຢງ ທາງການເມືອງ ອັນເກົ່າແກ່ ແຕ່ທ່ຽງເທິນ ລະຫວ່າງ ຫວຽດນາມ ກັບຈີນມາແລ້ວ. ດ້ວຍເຫດນີ້ ຊາວຫວຽດນາມ ຈຶ່ງຖືກ ບັງຄັບໃຫ້ຊື້ຜ້າແພ ແລະສິນຄ້າອື່ນໆ ຂອງຝຣັ່ງໃນລາຄາແພງກວ່າ ໃນຂະນະທີ່ປະລິມານເຂົ້າສານ ຈຳ ນວນມະຫາສານຂອງໂກແຊງຊີນ ຖືກສົ່ງໄປຝຣັ່ງ ດ້ວຍລາຍການໂຄສະນາຍຍົ້ງສົ່ງເສີມ ຢ່າງກວ້າງ ຂວາງວ່າ ນີ້ເປັນຄັ້ງທຳອິດແທ້ໆ ທີ່ເຂົ້າສານ ໄດ້ເຂົ້າໄປມີບົດບາດສຳຄັນ ຢູ່ໃນການແຕ່ງຢູ່ຄົວກິນຂອງ ຝຣັ່ງ. ຢູ່ປະເທດຟີລິບປິນ ຜົນຮັບມີລັກສະນະຄ້າຍຄຽງກັນ ແຕ່ເບິ່ງໃນລະຍະຍາວ ເລິກເຊິ່ງກວ່າ. ການກຳ ນົດລາຄາອັນເຂັ້ມງວດຂອງ ສະເປນ ມີຜົນສະທ້ອນຫນ້ອຍດຽວ ຕໍ່ການຄ້າຂາຍຕ່າງປະເທດຂອງຟີລິບປິນ ເຊິ່ງອັງກິດ ກັບຈີນ ຄອບຄອງເປັນເຈົ້າຢູ່. ແຕ່ເມື່ອລະບົບການຄ້າເສລີ ພາຍໃນກຳແພງລາຄາສິນຄ້າ ຂອງອະເມລິກາ ໄດ້ຮັບການຈັດຕັ້ງຂຶ້ນໃນປີ 1913, ເສດຖະກິດຟີລິບປິນ ກໍຖືກປັບແປງຮູບຊົ່ງ ໃຫ້ກົງກັບ ຄວາມຕ້ອງການຂອງຕະຫລາດອະເມລິກາ. ການເພິ່ງພາອາໄສແບບສະບາຍໆແນວນີ້ ດ້ານຫນຶ່ງກໍສ້າງ ຮັ່ງຄູນມີໃຫ້ແກ່ພໍ່ຄ້ານ້ຳຕານຄົນຟີລິບປິນ ແລະອີກທາງຫນຶ່ງ ກໍສົ່ງເສີມວິທີການຜະຫລິດອັນໄຮ້ປະສິດ ທິຜົນ ອັນເຮັດໃຫ້ລາຄານ້ຳຕານ ກັບຜົນຜະຫລິດອື່ນໆ ຂອງຟີລິບປິນ ຕົກເຮ່ຽອອກຈາກຕະຫລາດໂລກໄປ.

ໃນທາງກົງກັນຂ້າມ ຄວາມສຳຄັນຂອງລະບົບທະນາຄານສໄຫມໃຫມ່ ໄດ້ເປັນແນວທາງໃຫ້ການ ຜະຫນວກເສດຖະກິດສົ່ງອອກທີ່ເກີດຂຶ້ນມາເອງຂອງອາຊີຕາເວັນອອກສຽງໃຕ້ ເຂົ້າສູ່ຕະຫລາດໂລກ ແທນ ທີ່ຈະເຂົ້າສູ່ຕະຫລາດຂອງປະເທດທີ່ມີເມືອງໃຫຍ່ເທົ່ານັ້ນ. ທະນາຄານຂອງລັດໃນອິນດູຈີນ ຄອບຄອງ ຄວາມເປັນໃຫຍ່ ຢູ່ເຫນືອເສດຖະກິດ ຂອງປະເທດຫົວເມືອງຂຶ້ນ ແຕ່ໂດຍທົ່ວໄປ ທະນາການກາງຂອງ ຫົວເມືອງຂຶ້ນເຊັ່ນ ທະນາຄານຊະວາ ໄດ້ຜັດທະນາອ່າວຫລ້າຊ້າແຕ ແລະຢູ່ໃນອາຊີຕາເວັນອອກ ເກືອບ ທັງຫມົດ ທະນາຄານເອກະຊົນທີ່ມີການຕິດຕໍ່ກັນຢູ່ທົ່ວໂລກ ຄອບຄອງອົງເຂດນີ້ຫມົດ. ທະນາຄານອັງກິດ ເຊັ່ນ ຊາດເຕີ ແບງ ອອຟ ອິນເດຽ (the Chartered Bank of India) ອົດສະຕຣາລີ ແລະຈີນ ແລະ ສະຫະກອນການທະນາຄານ ຂອງ ຮອງກົງ ກັບ ຊຽງໄຮ້ ເກີດຂຶ້ນກ່ອນຫມູ ແລະຕັ້ງສາຂາໃຫຍ່ ຢູ່ໃນ ຫລາຍປະເທດ ໃນອາຊີຕາເວັນອອກສຽງໃຕ້. ຕໍ່ມາບໍ່ດົນ ກໍມີທະນາຄານຂອງ ເນເທີແລນ ອາເມລິກາ

ຝຣັ່ງ ຍີ່ປຸ່ນ ແລະຫລັງຈາກສົງຄາມໂລກຄັ້ງທີສອງແລ້ວຫນ້ອຍນຶ່ງ ທະນາຄານຈີນຄະນະຊາດ ກໍຕິດຕາມ ມາ ເຖິງຢ່າງໃດກໍດີ ໃນແຕ່ລະປະເທດ ພວກເອີລົບ ຊາວຈີນ ແລະຊາວອິນເດຽຟາກທະເລ ຈຳນວນນຶ່ງ ແລະແມນແຕ ຊາວອາຊີຕາເວັນອອກສຽງໃຕ້ຈຳນວນນ້ອຍນຶ່ງ ກໍໄດ້ຕັ້ງທະນາຄານແຫ່ງຊາດຂອງຕົນຂຶ້ນ ທະນາຄານ ບໍລິສັດປະກັນໄພ ແລະສະຖາບັນບໍລິການອະເນກປະສົງ ເຊັ່ນ ຫ້ອງການຕົວແທນ ນິຄົມຮ່ອງ ແຄບ ເຊິ່ງຄອບຄອງເປັນເຈົ້າໃນເລື່ອງທຸລະກິດສົ່ງອອກນຳເຂົ້າ ໄດ້ຈັດການເລື່ອງການປູກຝັງ ແລະເລື່ອງ ອື່ນໆອີກຫລາຍແນວ, ຫ້ອງການຕົວແທນເຫລົ່ານີ້ ມີຄວາມສຳຄັນຫລາຍທີ່ສຸດ ໃນຖານະເປັນເປັນສະຖາ ບັນສື່ກາງ ອັນມີຜົນເຮັດໃຫ້ເສດຖະກິດອາຊີຕາເວັນອອກສຽງໃຕ້ ຖືກໂຮບເຂົ້າຢູ່ໃນລະບົບ ເສດຖະກິດໂລກ. ເຖິງຢ່າງໃດກໍດີ ສະຖາບັນການເງິນເຫລົ່ານັ້ນ ຍັງມີບົດບາດຕົ້ນຕໍ ຢູ່ໃນເລື່ອງຈັດຮູບແບບ ແລະທ້ອນໂຮມ ເອົາເສດຖະກິດຍ່ອຍກະແຈກກະຈາຍ ເຂົ້າກັນອີກ. ທະນາຄານທັງທີ່ຫລາຍຊ້ອນ ເຕົ້າກັນຢູ່ໃນເມືອງໃຫຍ່ ຂອງແຕ່ລະປະເທດ ຢືນຢູ່ໃນຕຳແຫນ່ງສູນກາງຂອງລະບົບການເງິນ ທີ່ສະຫລັບຊັບຊ້ອນຫລາຍທີ່ສຸດ ຄຽງຂ້າງກັບຕາຂ່າຍອັນບໍ່ເປັນທາງການ ຂອງຈີນ ແລະອິນເດຽ, ທັງຫມົດເປັນປະທານ ລະບົບສິນເຊື່ອ "ແຫ່ງຊາດ". ສະພາການຄ້າເອີລົບ, ຈີນ ແລະອິນເດຽ ເຊິ່ງມັກເປັນພວກສົ່ງອອກເພື່ອຜົນກຳໄລ ໄດ້ໃຫ້ ບໍລິການ ຊຸມຊົນທຸລະກິດ ທີ່ຢູ່ໃນນິຄົມເມືອງຂຶ້ນ ທີ່ພວກເຂົາດຳເນີນທຸລະກິດຢູ່.

ນະໂຍບາຍເສດຖະກິດຂອງພວກລັດຖະບານອານານິຄົ(ແລະສະຫຍາມ) ສ່ວນຫລາຍມີຜົນສະທ້ອນ ແບບດຽວກັນ ຕໍ່ການການເສີມທາ ແຮງໃຫ້ແກ່ ໂຄງຮ່າງເສດຖະກິດ "ແຫ່ງຊາດ" ທີ່ພວມເຕີບໃຫຍ່. ຕົວຢ່າງ ວຽກງານການທະນາຄານ ການເງິນຕາ ແລະກົດຫມາຍກ່ຽວກັບສັນຍາ ໄດ້ອຳນວຍຄວາມ ສະດວກ ແລະຈັດຮູບແບບການພັດທະນາ ຂອງສະຖາບັນໃຫມ່. ກົດຫມາຍກ່ຽວກັບທີ່ດິນ ການອອກໃບຕາ ດິນ ແລະ ການສຳຫລວດວັດແທກທີ່ດິນ ຢ່າງເປັນປະຈຳ ແລະປົກກະຕິ ຢູ່ໃນ ຟິລິບປິນ ເມື່ອສະຕະວັດ ທີ 19 ແລະ ໃນສະຫຍາມ ເມື່ອສະຕະວັດ ທີ 20, ມາດຖານ ລະຍະສັນຍາເຊົ່າດິນປູກຝັງ 25 ປີ ຢູ່ໃນ ເນເທີແລນ ອິນດີສ, ພະລາຊະບັນຍັດ ວ່າດ້ວຍການຈຳຈອງທີ່ດິນສະບັບໃຫມ່ ຢູ່ໃນພະມ້າ ຫລື ເຂດອະນຸຮັກ ຂອງມາເລ ທັງຫມົດນີ້ ໄດ້ສ້າງໂອກາດ ຫລາກຫລາຍຮູບແບບ ໃຫ້ເຂົ້າເຖິງການຊົມໃຊ້ດິນ ແລະມີຜົນສະ ທ້ອນຢ່າງແຮງຕໍ່ ຄວາມພົວພັນຂອງຊາວນາ ກັບ ດິນ. ຜົນສະທ້ອນທີ່ເລິກເຊິ່ງກວ່າຫມູ ຂອງສິ່ງເຫລົ່ານີ້ ແລະກົດຫມາຍກ່ຽວກັບທີ່ດິນ ແມ່ນທາງເສດຖະກິດ ແລະສັງຄົມ, ແຕ່ກໍມີຜົນກະທົບໃນດ້ານອື່ນນຳ, ກົດ ຫມາຍເຫລົ່ານີ້ ເຮັດໃຫ້ການຖືກຳມະສິດທີ່ດິນນາ ອັນມີມາແຕ່ບູຮານນະການ ເຊິ່ງເທົ່າເຖິງປັດຈຸບັນ ມີຄວາມແຕກຕ່າງກັນໄປ ຕາມແຕ່ລະທ້ອງຖິ່ນນັ້ນ ໄດ້ອອນເອົາມະຫາຊົນຈຳນວນຫລວງຫລາຍ ເຂົ້າສູ່ລະ ບົບບໍລິຫານໂດຍກົງ ແລະເປັນ ປົກກະຕິຫລາຍຂຶ້ນ. ໂດຍທົ່ວໄປແລ້ວ ກົດຫມາຍໃຫມ່ ໄດ້ຊ່ອຍສ້າງຮູບແບບ ພາກປະຕິບັດ ດ້ານເສດຖະກິດ ທີ່ແຕກຕ່າງຊຸດຫນຶ່ງຕ່າງຫາກ ຢູ່ພາຍໃນລະບົບ "ແຫ່ງຊາດ" ຂອງແຕ່ ລະບົບ.

ໃນລັກສະນະຄ້າຍຄືກັນ ຂະນະທີ່ນະໂຍບາຍກ່ຽວກັບພາສີຂອງລັດຖະບານ ແມ່ນສິ່ງສຳຄັນກວ່າ ຫມູ ຕໍ່ຜົນຮັບທາງດ້ານສັງຄົມເສດຖະກິດຂອງລັດ, ນະໂຍບາຍພາສີນັ້ນ ກໍຍັງມີສ່ວນກ່ໃຫ້ເກີດໂຄງສ້າງ ຫລາຍແບບແກ່ເສດຖະກິດ "ແຫ່ງຊາດ" ນຳອີກ. ໜັງສືພິມລາຍປັກ ຊື່ "ການຈັດສັນທີ່ດິນ" ຢູ່ ພະມ້າ ຂອງອັງກິດ ດ້ວຍຈຸດປະສົງເພື່ອທົບທວນຄືນ ຜະຫລິດຕະພາບຂອງທີ່ດິນ ແລະການເປັນເຈົ້າກຳມະສິດ ທີ່ດິນ ແລະເພື່ອປະເມີນພາສີອີກ ໄດ້ຊ່ອຍໃຫ້ການເກັບພາສີທົ່ວໄປ ໃນພະມ້າ ມີຄວາມເປັນໄປໄດ້, ບາງທີ ອາດຫນັກຫນ່ວງ ແລະເປັນເອກະພາບໃນພາກປະຕິບັດຫລາຍກວ່າລະບົບທີ່ເຄີຍໃຊ້ມາກ່ອນ. ທົ່ວທຸກບ່ອນ ໃນພາກພື້ນອາຊີຕາເວັນອອກສຽງໃຕ້ ໃນຍຸກອານານິຄົມຮຸ່ງເຮືອງ ໄດ້ເກີດມາທ່າອຽງ ຢາກຖອຍຫ່າງ ຈາກຮູບແບບເກັບພາສີ ອັນຕ່າງກັນໃນແຕ່ລະທ້ອງຖິ່ນ ແລະຕາມແບບສະເພາະບຸກຄົນ ນັ້ນຄືການເກັບ ເອົາຕາມຂະນິດຜົນຜະຫລິດກະສິກຳ ແລະຫັດຖະກຳອັນຫລາກຫລາຍ, ເກັບຕາມປະເພດການບໍລິການ ຂອງແຮງງານຕ່ຳນາຍຈ້າງ ແລະໃນຮູບແບບຂອງພາສີ ຈາກການປູກຝິ່ນ ແລະການພະນັນ ຫລື ຄ່າຂະ ຫນອນ (ຜ່ານດ່ານ) ຕາມຖະຫນົນ ແລະແມ່ນ້ຳ ໂດຍຂາຍໃຫ້ແກ່ຜູ້ໃຫ້ລາຄາສູງສຸດ ຫລື ເວນວ່າງໃຫ້ແກ່

ຜູ້ເປັນທີ່ໄວ້ວາງໃຈຂອງເຈົ້າຊີວິດ. ສ່ວນຢູ່ຫວຽດນາມ ກໍເກີດມີພາສີແບບໃຫມ່ຂຶ້ນມາແທນ ຄື ພາສີສັບພາ ກອນ ສຳລັບເກືອ ແລະເຫລົ້າ ແລະກັບສິນຄ້າບໍລິໂພກຢ່າງອື່ນໆ ຄື ພາສີຄ່າຫົວ(ຄົນ), ທີ່ດິນ ແລະພາສີ ຜົນຜະຫລິດເປັນເງິນສົດ, ພາສີສິນຄ້ານຳເຂົ້າ-ສົ່ງອອກ. ຈາກຮູບແບບເຫລົ່ານີ້ ໄດ້ກໍ່ໃຫ້ເກີດມີລະບົບການ ເກັບພາສີແບບເອກະພາບ ຫລາຍຂຶ້ນ ແລະມີປະສິດທິຜົນນັບມື້ນັບສູງຂຶ້ນໃນທົ່ວອານານິຄົມ ເຊິ່ງສະແດງ ອອກດ້ວຍ "ລະບົບເງິນຕາແຫ່ງຊາດ"ທີ່ໄດ້ມາດຕະຖານ ແລະເປັນສື່ກາງທົ່ວໄປ.

ສິ່ງຫນຶ່ງທີ່ໂດດເດັ່ນຂຶ້ນ ຢູ່ໃນການຈັດຕັ້ງໃຫມ່ ຂອງວຽກງານບໍລິຫານ ແລະເສດຖະກິດ ໃນຍຸກອາ ນານິຄົມຮຸ່ງເຮືອງ ກໍຄືບົດບາດແບບບໍ່ເຄີຍມີມາແຕ່ກ່ອນຂອງລັດຖະບານ. ຕາມປະເພນີແລ້ວ ຢູ່ໃນອາຊີ ຕາເວັນອອກສຽງໃຕ້ ພາລະຫນ້າທີ່ຕົ້ນຕໍ ຂອງຜູ້ປົກຄອງ ແມ່ນ ການຕ້ອງເປັນ ສັນຍະລັກໂດຍຕົວຕົນ ຂອງເພິ່ນເອງ ແລະການຍອມຮັບກົດລະບຽບສັງຄົມ ມີອຸດົມການທາງວັດທະນະທຳ ແລະຕ້ອງເປັນລັດ ຫນຶ່ງ ທີ່ເຂົ້າແກ້ບເຂົ້າເກຽກັບຈັກກະວານ. ລັດຖະບານອານານິຄົມໃຫມ່ ແລະລັດຖະບານສະຫຍາມ ດຳ ລົງຄົງຕົວຢູ່ ໂດຍຕົ້ນຕໍແລ້ວ ແມ່ນເພື່ອກະທຳ, ໂດຍຈັດຫາຫນ້າວຽກທີ່ຕ້ອງບັນລຸ ເປັນລາຍການໄວ້ເຕັມ ຕະຫລອດປີເອົາເອງ. ໂດຍອີງຕາມມາດຕະຖານເກົ່າ ຂອງອາຊີຕາເວັນອອກສຽງໃຕ້ ພວກເພິ່ນຮູ້ສຶກວ່າມີ ຄວາມຈຳເປັນພິເສດທີ່ຈະເຮັດໃຫ້ປະເພນີເກົ່າແກ່ ກາຍເປັນເຫດການບັງເອີນ ບໍ່ເປັນປົກກະຕິ ທັງນີ້ ເພື່ອ ຈະນຳເອົາຄວາມເປັນເອກະພາບ ມາສູ່ສັງຄົມໃນເຂດປົກຄອງເລັກໆນ້ອຍໆ ຈຳນວນມາກມາຍຂອງຕົນ ອັນເປັນການຖາງທາງໄປສູ່ຄວາມກ້າວຫນ້າທາງເສດຖະກິດ, ເພື່ອຈັດຕັ້ງ, ປະຕິຮູບ ແລະກວດກາຄວບ ຄຸມ. ເພື່ອຈະເຮັດແນວນີ້ ພວກລັດຖະບານໃຫມ່ ເຊິ່ງມີອຳນາດແບບບໍ່ເຄີຍມີມາກ່ອນ ຄືມີຄວາມຍິ່ງໃຫຍ່ ທາງດ້ານກຳລັງທະຫານ, ພາຫະນະເຄື່ອງມືທັນສະໄຫມ, ລາຍຮັບຫລວງຫລາຍມາກມາຍ ແລະອັນ ສຸດທ້າຍ ຢູ່ໃນອານານິຄົມ ແມ່ນອິດສະລະພາບໃນການປະດິດສິ່ງໃຫມ່ໆ ຈາກການຍຶດຄອງ ແລະພື້ນຖານ ອຳນາດອິດທິພົນຈາກພາຍນອກ ແລະການອ້າງອີງໃສ່ວັດທະນະທຳ.

ເຖິງແມ່ນວ່າ ບໍ່ແມ່ນຍ້ອນກິດຈະກຳຂອງຝ່າຍລັດຖະບານອ້ອຍຕ້ອຍກໍຕາມ ຜົນຮັບກໍແມ່ນ ຄວາມ ປ່ຽນປ່ຽນຢ່າງກົງກັນຂ້າມຢ່າງເປັນປະຫວັດການເລີຍ. ສັງຄົມທັງຫລາຍ ເຊິ່ງໄດ້ຮັບການຈັດຕັ້ງຂຶ້ນຢ່າງ ງ່າຍໆ ທັງທາງດ້ານການເມືອງ ແລະເສດຖະກິດ ນັ້ນ ຖືກບີບຮັດຕິດແຫນ້ນຢູ່ລະຫວ່າງ ໂຄງຮ່າງ ອາດຍາສົດ (ລະບົບລາຊະການ) ແລະເສດຖະກິດ. ຢ່າງໃດກໍດີ, ຂະບວນການອັນດຽວກັນນີ້ ໄດ້ດຸດຄົ້ນມ້າງ ເພສັງຄົມທັງຫລາຍ ເຊິ່ງໃນເມື່ອກ່ອນ ມີລະບຽບວິໄນຫມັ້ນຄົງທຸ່ນທ່ຽງປອດໄພ, ມັນໄດ້ກໍ່ໃຫ້ເກີດຄວາມ ມັກໃຫຍ່ໄຝ່ສູງ ແລະທັດສະນະວິໄສແບບໃຫມ່ ບໍ່ວ່າເລື່ອງຄວາມສັບສົນອົນອ໊ວດ້ານສັງຄົມ, ການຈຳແນກ ແບ່ງປັນ ດ້ານວັດທະນະທຳ ຄວາມເຊື່ອມໂຊມ ແລະຄວາມໄຮ້ຫວັງ. ຂໍ້ຮຽກຮ້ອງພື້ນຖານອັນຫນຶ່ງ ຂອງ ລັດທິຊາດນິຍົມໃຫມ່ ຈຶ່ງແມ່ນການແກ້ບັນຫາຄວາມສັບສົນ ອັນເປັນຜົນຮັບແຫ່ງການປ່ຽນປ່ຽນ ຢ່າງເປັນ ປະຫວັດການ ນັ້ນຄືການອະນຸຮັກໂຄງຮ່າງອັນຮັດແຄບນັ້ນໄວ້, ໃນຖານະເປັນປະຊາຊາດນຶ່ງ ເພື່ອສ້າງສາ ຄືນໃຫມ່ ຄວາມສົມດຸນສອດຄອງທາງສັງຄົມ ແລະວັດທະນະທຳ ທີ່ສູນຫາຍໄປແລ້ວນັ້ນໄວ້.

# ບົດທີ 22 ການປ່ຽນແປງຮູບແບບເສດຖະກິດ, 1870 - 1940

ມີການເວົ້າເຖິງ ຊະວາ ໂຍກຄວາມເກີນໄປແດ່ ໃນຍຸກສະໄໝແຫ່ງລະບົບວັດທະນະທຳ ໂດຍເວົ້າວ່າ ເກາະດອນແຫ່ງນີ້ ເປັນແຫລ່ງປູກຝັງກວ້າງໃຫຍ່ບ່ອນນຶ່ງຂອງລັດຖະບານ. ໃນທຳນອງດຽວກັນ ກໍໄດ້ມີການແຜ່ກະຈາຍຄວາມຮູ້ສຶກອັນຈັບໃຈທີ່ວ່າ ໃນຍຸກສູງສຸດຂອງລັດທິອານານິຄົມ ເສດຖະກິດຂອງພາກພື້ນອາຊີອາຄະເນທັງຫມົດ ແມ່ນສຸມໃສ່ການສົ່ງອອກຜົນຜະຫລິດ. ຄວາມຈິງແລ້ວ ຄວາມຮູ້ສຶກຈັບໃຈທີ່ວ່ານີ້ ຢູ່ຫ່າງໄກກັບຄວາມເປັນຈິງຫລາຍ. ການປູກຝັງຂອງຊາວນາເພື່ອກຸ້ມກິນ ໂດຍສະເພາະການປູກເຂົ້າ ຍັງຄົງເປັນຂະແໜງການທີ່ກວມກວ້າງຂະແໜງການດຽວຂອງເສດຖະກິດ. ໃນລະຍະນັ້ນ ການປູກຝັງເພື່ອຄ້າຂາຍສຳລັບບໍລິໂພກພາຍໃນປະເທດ, ການອຸດສາຫະກຳຂະຫນາດນ້ອຍ, ການອົບສົ່ງ ແລະ ລະບົບສິນເຊື່ອ ໄດ້ເຕີບໃຫຍ່ຂຶ້ນຢ່າງຫນັກແໜ້ນແລ້ວ. ການເພີ່ມທະວີຈຳນວນປະຊາກອນຢ່າງວ່ອງໄວ ກໍ່ໃຫ້ເກີດເຫດການປ່ຽນແປງທາງເສດຖະກິດແບບກະທັນຫັນຫລາຍໂດຍສະເພາະໃນຫມູ່ຊາວນາ. ຢ່າງໃດກໍດີ ອຸດສາຫະກຳສົ່ງອອກທັງຫລາຍທີ່ມີມາແຕ່ກ່ອນ ຍັງຄົງເປັນກຳລັງທາງເສດຖະກິດອັນໂດດເດັ່ນ ຂອງຍຸກນັ້ນ ດັ່ງນັ້ນຈຶ່ງມີອິດທິພົນສູງຕໍ່ການພັດທະນາຂະແໜງການເສດຖະກິດອື່ນໆ ແລະແນ່ນອນວ່າ ຢູ່ໃນສັງຄົມໂດຍທົ່ວໄປນຳ, ດັ່ງນັ້ນ ການເຕີບໃຫຍ່ຂອງອຸດສາຫະກຳສົ່ງອອກທັງຫລາຍ ຈຶ່ງສາມາດເປັນແກນເລື່ອງຕົ້ນຕໍ ເພື່ອຄົ້ນຄວ້າຫົວບົດກ່ຽວກັບການປ່ຽນແປງຮູບແບບເສດຖະກິດອັນກວ້າງຂວາງ ສັບຊ້ອນທີ່ເກີດຂຶ້ນໃນລະຫວ່າງປີ 1870 ແລະ 1940 ແຕ່ຫາກສຶກສາກັນພໍແຕ່ຜິວເຜີນ ເທົ່ານັ້ນ.

ແຮງຊຸກດັນໃຫຍ່ ສຳລັບການຂະຫຍາຍຕົວດ້ານການສົ່ງອອກ ເກີດຈາກຄວາມຕ້ອງການອັນທະວີສູງຂຶ້ນຂອງຕະລາດໂລກ ແລະຍິ່ງຂະຫຍາຍຕົວໄດ້ເຂັ້ມແຂງກວ່າ ຢູ່ໃນພາກພື້ນອາຊີອາຄະເນ ເມື່ອເຮືອຈັກອາຍນ້ຳເຂົ້າມາໃນຊຸມປີ 1860 ເພາະສາມາດອົບສົ່ງສິນຄ້າຈຳນວນຫລວງຫລາຍ ໄດ້ໃນລາຄາຖືກໆ. ເຖິງຢ່າງໃດກໍດີ ຕະຫລາດໂລກ ກໍຫາກສ້າງອິດທິພົນດຶງດູດສ່ວນໃດສ່ວນນຶ່ງໃສ່ທົ່ວທຸກແຫ່ງ ໃນໂລກ. ເສັ້ນທາງອັນສະເພາະທີ່ສ້າງຄວາມເຕີບໃຫຍ່ດ້ານການສົ່ງອອກຂອງອາຊີອາຄະເນ ແມ່ນມາຈາກອິດທິພົນ ອັນເຂັ້ມແຂງ ຂອງກະໂຕສະຖານະການໃນພາກພື້ນນັ້ນເອງ. ລັກສະນະທົ່ວໄປບາງຢ່າງ ຂອງສະພາບຮວມຂອງເສດຖະກິດອາຊີອາຄະເນ ຍຸກກ່ອນທັນສະໄໝ ເປັນສິ່ງອ່ອນໄຫວຫລາຍ. ເບິ່ງຮວມແລ້ວ ພື້ນທີ່ໂດຍທົ່ວໄປມີຄົນຢູ່ຫນ້ອຍ ແລະບໍ່ສະເໝີກັນ. ການອົບສົ່ງຊັກຊ້າ ແລະລຳບາກ. ກິດຈະກຳຊື້ຂາຍທາງເສດຖະກິດສ່ວນໃຫຍ່ ມັກດຳເນີນການພາຍໃຕ້ຮູບແບບການແລກປ່ຽນ; ການເກັບພາສີສ່ວນຫລາຍ ກໍເກັບເປັນສິ່ງຂອງແລະແຮງງານ, ການໄຫລວຽນເງິນຕາ ຫລືການໃຫ້ສິນເຊື່ອ ມີຫນ້ອຍ. ມັນແມ່ນສະພາບການຂອງເສດຖະກິດຂະຫນາດນ້ອຍລະດັບທ້ອງຖິ່ນ ແລະພໍກຸ້ມຕົນເອງເປັນສ່ວນໃຫຍ່ ໂດຍມີສາຍສຳພັນແບບຍານໆ ໃນລະດັບແຂວງແລະລະດັບປະເທດ ເຊິ່ງການພົວພັນຕໍ່ກັນ ມັກມີລັກສະນະວັດທະນະທຳ ແລະສັງຄົມຫລາຍກວ່າທາງເສດຖະກິດ. ອັນທີ່ແນ່ນອນ ກໍຄືວ່າ ອາຊີອາຄະເນ ເຄີຍມີການສົ່ງອອກສິນຄ້າບາງຢ່າງ ແລະມີມາສະເໝີມີຢູ່ແລ້ວ ໂດຍສະເພາະ ຈາກເຂດເກາະດອນ ເຊິ່ງການສົ່ງອອກ ມີຄວາມສຳຄັນສຳລັບທ້ອງຖິ່ນຫລາຍ. ນອກຈາກແຮ່ທາດສຳຄັນບາງຊະນິດ ເຊັ່ນ ຊີນ ແລະ ຄຳແລ້ວ ຈຸດສຳຄັນໃນເລື່ອງນີ້ ແມ່ນການສົ່ງອອກເຄື່ອງ ບໍລິໂພກກະສິກຳ ຈາກເຂດຊຸ່ມຮ້ອນ ຫລື ເຂດເຄິ່ງຊຸ່ມຮ້ອນ ເຊັ່ນ ການພູ ແລະ ໝາກຈັນຫອມ (cloves and nutmeg) ຈາກ ໂມລູກາສ໌, ພິກໄທ ຈາກ ສຸມາຕຣາ, ກາເຟ ຈາກຊະວາຕາ ເວັນຕົກ. ເທົ່າທີ່ຍົກມານີ້ ກໍສະເພາະແຕ່ອັນທີ່ສຳຄັນກວ່າໝູ່. ຍັງມີເຫດຜົນດີໆ ອີກສຳລັບເລື່ອງນີ້. ປະເທດໃນອາຊີອາຄະເນ ສົ່ງອອກວັດຖຸດິບ ບໍ່ແມ່ນສິນຄ້າສຳເລັດຮູບ ຍ້ອນວ່າ ເສດຖະກິດພື້ນຖານໃນຂົງເຂດແມ່ນການຜະຫລິດໂດຍອຸດສາຫະກຳຂະຫນາດນ້ອຍແບບຄອບຄົວ ເຊັ່ນ ຜ້າແພຕ່ຳມື ແລະເຄື່ອງຫັດຖະກຳແບບໃນວັງ. ໃນທາງປຶ້ນກັນ ນັບໄດ້ຫລາຍສະຕະວັດມາແລ້ວ ອາຊີອາຄະເນ ໄດ້ນຳເຂົ້າສິນຄ້າປະເພດຜ້າແພຈາກອິນເດັຽ ແລະ ເຄື່ອງປັ້ນດິນເຜົາຈາກຈີນ ເປັນຈຳນວນຫລວງຫລາຍ.

ຮູບແບບຢ່າງນີ້ ຂອງການຄ້າ ຄື ແລກປ່ຽນ ວັດຖຸດິບກະສິກຳຈາກເຂດຮ້ອນຊຸ່ມ ແລະແຮ່ທາດ ສຳຄັນບາງຊະນິດ ກັບສິນຄ້າສຳເລັດຮູບນຳເຂົ້າ ຍັງສືບຕໍ່ດຳເນີນມາຕະຫລອດເວລາຕົບໃຫຍ່ສຸດຂີດ ຂອງ ການສົ່ງອອກ ໃນລະຫວ່າງທ້າຍສະຕະວັດທີສິບເກົ້າ ແລະຕົ້ນສະຕະວັດທີຊາວ. ມີເຫດຜົນໃຫຍ່ໆ ຢູ່ສອງອັນ ສຳລັບເລື່ອງນີ້ ຄື ການດຳລົງຄົງຕົວອັນຍາວນານແລະວ່ອງໄວ ໃນຖານະຜູ້ອອກໜ້າຂອງຊາດຕາເວັນ ຕົກ ໃນການປະຕິວັດອຸດສາຫະກຳປະສົມປະສານກັບການຜະອຳນາດແບບລ່າເມືອງຂຶ້ນ ຂອງພວກເຂົາ ຢູ່ ໃນພາກພື້ນອາຊີອາຄະເນ ແລະຍ້ອນກະໂຕເງື່ອນໄຂ ຂອງອາຊີອາຄະເນເອງ.

ຊາດຕາເວັນຕົກ ເມື່ອໄດ້ຂຶ້ນຂັບຂີ່ຢູ່ຈອມຟອງແຫ່ງການປ່ຽນແປງຮູບແບບເສດຖະກິດແລ້ວ ກໍພົບ ພໍ້ວ່າ ຢູ່ໃນອາຊີອາຄະເນ ມີຕະຫລາດຢູ່ແລ້ວ ສຳລັບເຄື່ອງຈັກຕ່ຳຜ່ນລາຄາຖືກໆ, ນ້ຳມັນກາສ ແລະ ຫົວຈັກລົດໄຟ. ການທະວີຈຳນວນຢ່າງໄວວາຂອງປະຊາກອນໃນເອີຣົບ ແລະແຫ່ງອື່ນໆຮຽກຮ້ອງ ນ້ຳຕານ ຊາ ແລະກາເຟ ຫລາຍຂຶ້ນ ສ່ວນການອຸດສາຫະກຳເຄື່ອງກະປ໋ອງ ແລະໄຟຟ້າ ກໍຕ້ອງການຊີ່ນ, ລົດຖີບ ແລະຕໍ່ມາອຸດສາຫະກຳລົດໂອໂຕ ກໍຕ້ອງການຢາງຕີນລົດ. ລັດຖະບານລ່າເມືອງຂຶ້ນ ທີ່ນັບມື້ນັບ ມີອຳນາດ ຫລາຍຂຶ້ນ ໄດ້ເຊື່ອງຊ້ອນຜົນປະໂຫຍດເຂົ້າຂ້າງຊາດຕົນເອງຢ່າງເຫັນແກ່ໂຕ ສັບປົນກັບເລື່ອງ ຄວາມ "ຈະ ເລີນສີວິໄລ" ໄດ້ພາກັນສົ່ງເສີມການສົ່ງອອກສິນຄ້າກະສິກຳຢ່າງໃຫຍ່ ແລະເກືອບບໍ່ເຮັດຫຍັງເລີຍ ເພື່ອສົ່ງ ເສີມການຜະຫລິດສິນຄ້າສຳເລັດຮູບຂອງທ້ອງຖິ່ນ.

ໃນລະຍະດຽວກັນ ກະໂຕເງື່ອນໄຂດ້ານເສດຖະກິດ ແລະສັງຄົມໃນອາຊີອາຄະເນເອງ ໄດ້ເຮັດໃຫ້ ການຫັນປ່ຽນເປັນອຸດສາຫະກຳພາຍໃນ ພໍຄົງຕົວຢູ່ໄດ້ພຽງແຕ່ໃນລະຍະສັ້ນ ແລະບໍ່ສາມາດເປັນໄປໄດ້ ເລີຍ ເມື່ອການສົ່ງອອກສິນຄ້າກະສິກຳຈຳນວນມະຫາສານ ບັນລຸຜົນຢ່າງງ່າຍດາຍ.

ກ່ອນຍຸກເບັ່ງບານຂອງການສົ່ງອອກ ດ້ານການເໜັງຕີງທາງເສດຖະກິດ ຄວາມມຸ່ງຫວັງ ແລະ ຄວາມອາດສາມາດເພື່ອວາງໂຕໃຫ້ມີບົດບາດໃໝ່ ປະເທດອາຊີອາຄະເນ ມີຂອດຈຳກັດຢູ່ຫລາຍ. ຕົວຢ່າງ ເລື່ອງຂອງຊາວນາ ເຊິ່ງສ່ວນໃຫຍ່ ຕັ້ງຮາກຖານດຳລົງຊີວິດຢູ່ແບບພໍກຸ້ມຢູ່ກຸ້ມກິນເທົ່ານັ້ນ. ພວກເຂົາ ມີດິນສ້າງຢູ່ທຳກິນພຽງພໍຜະຫລິດໄດ້ຫລາຍກວ່າທີ່ຕ້ອງການ ແລະນຳໄປແລກປ່ຽນກັບສິ່ງທີ່ຈຳເປັນ ເລັກໆ ນ້ອຍໆ ເຊັ່ນ ເກືອ ປາ ແລະໄດ້ເຈລະຈາຕົກລົງ ແມ່ນແຕ່ໃນເລື່ອງທີ່ຂັດກັບຄວາມຕ້ອງການຂອງຊຸມ ຊົນ ຊັ້ນນຳ ຢູ່ໃນສັງຄົມຂອງພວກເຂົາ. ທັງຫມົດນີ້ ຢືນຢັນໄດ້ຈາກປະສົບການຂອງຫລາຍຮຸ່ນຄົນ ທີ່ຝັງຈົມເລິກ ຢູ່ໃນຄ່ານິຍົມ ແລະຄວາມເຊື່ອຖືຂອງພວກເຂົາ. ພວກຊາວນາເກືອບທັງຫມົດ ຍົງຄົງຕົກເປັນແຮງງານ ເກນ ຫລືບໍ່ກໍຂຶ້ນກັບເຈົ້ານາຍ ໃນຖານະແຫລ້ງ ຫລື ຂ້ອຍຫນີ້ສິນ ອັນໄດ້ຈຳກັດການ ເໜັງຕີງດ້ານເສດຖະ ກິດຂອງພວກເຂົາ ບໍ່ໃຫ້ໄປໃນທິດທາງອື່ນໄດ້. ບໍ່ມີສິ່ງໃດທີ່ຈະເກືອດຫ້າມ ບໍ່ໃຫ້ຊາວນາຕອບສະຫນອງຕໍ່ ຄວາມເປັນໄປໄດ້ ໃນການສົ່ງອອກຜົນຜະຫລິດ, ມີແຕ່ກົງກັນຂ້າມ ມັນໄດ້ກຳນົດທິດທາງ ທີ່ພວກຊາວນາ ຄວນຈະເຮັດນຳອີກຊ້ຳ ທັງວາງຂອບເຂດໄວ້ວ່າ ພວກເຂົາຈະໄປໄດ້ໄກເທົ່າໃດ ໄວເທົ່າໃດ ໂດຍປັບປ່ຽນຕົນ ເອງໃຫ້ເຂົ້າກັບແຮງຊຸກດັນຂອງຕະຫລາດໂລກ.

ທົ່ວທຸກແຫ່ງຫົນໃນອາຊີອາຄະເນ ການຕອບສະຫນອງອັນທຳອິດແລະຍິ່ງໃຫຍ່ສຸດ ຂອງພວກ ເຂົາ ແມ່ນການສົ່ງອອກທັນຍະພືດ ຂອງຊາວໄຮ່ຊາວນານ້ອຍ, ບາງເທື່ອ ແມ່ນຢູ່ກັບບ້ານເອງ ແຕ່ສ່ວນຫລາຍ ແລ້ວ ແມ່ນຈາກເຂດປ່າດົງທີ່ຢູ່ໃກ້ໆ ຫລື ຈາກບ່ອນປູກຝັງທີ່ເຊົ່າຈາກເຈົ້າທີ່ດິນ ເຂດອ້ອມແອ້ມ. ນີ້ແມ່ນ ເລື່ອງຍິ່ງໃຫຍ່ທີ່ບໍ່ເຄີຍມີມາກ່ອນ. ອຸດສາຫະກຳສົ່ງອອກບາງຢ່າງໃນຕົ້ນຊຸມປີຂອງສະຕະວັດ ໄດ້ຕັ້ງຕົ້ນຂຶ້ນ ໃນຮູບແບບດຽວກັນ: ໃນສະຕະວັດທີສິບຫ້າ ແລະສິບຫົກ ເຈົ້າທີ່ດິນນ້ອຍ ໃນ ໂມລູກັນ ໄດ້ຊື້ຂາຍແລກປ່ຽນ ການພູ (ເຄື່ອງຫອມໃສ່ອາຫານ) ແລະຫມາກຈັນຫອມ ກັບຜ້າແພ ແລະເຂົ້າ ແລະພວກຊາວນາ ຢູ່ພາກ ກາງພະມ້າ ເມື່ອສະຕະວັດທີສິບເຈັດ ກໍໄດ້ສຸມໃສ່ການປູກຝ້າຍເພື່ອຂາຍໃຫ້ຂະບວນ ກຽນ ທີ່ເດີນທາງ ໄປຈີນ. ເຫດການຢ່າງດຽວກັນນີ້ເກີດຂຶ້ນ ໃນຂະຫນາດກວ້າງໃຫຍ່ກວ່າໃນສະຕະວັດທີສິບເກົ້າ ແລະສະຕະ ວັດທີຊາວ: ຊາວນາພະມ້າ ໄທ ແລະ ຫວຽດນາມໃຕ້ ຫລາຍແສນຄົນ ໄດ້ອົບພະຍົບໄປຕັ້ງຖິ່ນຖານຢູ່ບໍລິ ເວນປາກແມ່ນ້ຳເພື່ອປູກເຂົ້າໄວ້ແລກປ່ຽນເອົາເງິນສົດ ແລະສິນຄ້ານຳເຂົ້າອື່ນໆ, ຊາວນາຫລາຍແສນຄົນ

ໃນສຸມາຕຣາ ແລະບໍນຽວປູກຕົ້ນຢາງພາຣາຕາມຊາຍປ່າຢູ່ໃກ້ໆກັບບ່ອນຢູ່ ແລະມີອີກຫລາຍຫມື່ນຄົນ ປູກ ທັນຍະພືດສິ່ງອອກຢ່າງອື່ນ ຢູ່ແຫ່ງອື່ນໆອີກ.

ມັນແມ່ນການຕອບສະຫນອງຢ່າງໄວວາ ແລະມະຫຶມາ ແມ່ນການປ່ຽນແປງຄັ້ງຍິ່ງໃຫຍ່ ທີ່ເປັນໄປ ຢ່າງງ່າຍດາຍ ກໍຍ້ອນວ່າມັນຮຽກຮ້ອງໃຫ້ມີການປ່ຽນແປງ ແຕ່ດ້ານເລັກດ້ານນ້ອຍ ຢູ່ໃນພຶດຕິກໍາຂອງ ພວກຊາວນາ ແລະຄ່ານິຍົມດ້ານເສດຖະກິດເທົ່ານັ້ນ. ການປູກພືດພັນທີ່ຮູ້ຈັກດີແລ້ວ ເຊັ່ນ ເຂົ້າ ແລະ ຕົ້ນພ້າວ ຫລື ພືດແນວໃຫມ່ ເຊັ່ນຕົ້ນຢາງພາຣາ ຫລື ຕົ້ນຊາ ເຊິ່ງລາຄາໃນຕະຫລາດ ເຄີຍຖືກຮັບຮອງ ມາແລ້ວຈາກການປູກຝັງຂອງພວກອີຣົບ ແມ່ນການຂະຫຍາຍຕົວຕາມແບບທໍາມະຊາດຂອງຊາວນາ ເພື່ອການກະສິກໍາພໍພຽງລ້ຽງຊີບຂອງພວກເຂົາ. ຜູ້ຄົນທີ່ປູກເຂົ້າສິ່ງອອກເປັນຫລາຍລ້ານໂຕນ ກໍຍັງແມ່ນ ຊາວນາຢູ່ນັ້ນເອງ ພວກເຂົາບຸກເບີກດິນໃຫມ່ຢ່າງກຽມພ້ອມ ເພື່ອການຜະຫລິດ, ປູກພືດພັນແນວໃຫມ່ ຮັບເອົາໂຄມໄຟນ້ໍາມັນກາສມາໃຊ້ ແລະໃຊ້ເງິນສົດຫລາຍຂຶ້ນ ແຕ່ຄວາມສາມາດເຫນັງຕີງ ທາງເສດຖະ ກິດ ຂອງພວກເຂົາ ບໍ່ໄດ້ຂະຫຍາຍອອກໄປໄກເທົ່າໃດ. ພວກເຂົາຍັງຄົງເປັນຜູ້ຜະຫລິດ ຂະຫນາດ ນ້ອຍຢູ່ ແລະສ່ວນໃຫຍ່ ກໍປ່ອຍໃຫ້ຜູ້ອື່ນນໍາເອົາສິນຄ້າໄປຈໍາຫນ່າຍ ຢູ່ຕະຫລາດໃຫ້. ໃນປີ 1870 ມີຄົນ ຫນ້ອຍດຽວ ທີ່ເຕັມໃຈປະລະບ້ານເຮືອນໄປຮັບຈ້າງເຮັດວຽກປູກຝັງ ຫລື ໄປຢູ່ເມືອງອື່ນ ແລະນີ້ກໍຍັງເປັນຈັ່ງຊັ້ນ ຢູ່ຫລາຍແຫ່ງ ຈົນຮອດປີ 1980 ຄຸນຄ່າດ້ານເສດຖະກິດ ທີ່ມີມາແລ້ວ ຂອງຊາວອາຊີອາຄະເນ ເຊິ່ງສ່ວນ ຫນ້ອຍ ຜູ້ບໍ່ເປັນຊາວນາ ເຊັ່ນ ພວກພໍ່ຄ້າ ຫົວຫນ້າຝ່າຍສາສະຫນາ ພວກຂຸນນາງ ແລະເຈົ້າຊີວິດ ພວກນີ້ ໄດ້ຈໍາກັດການຕອບສະຫນອງການສິ່ງອອກເຄື່ອງກະສິກໍາ. ໃນອາຊີອາຄະເນ ແບບເດີມນັ້ນ ກຽດຕິ ຍົດ ອາດນໍາພາໄປສູ່ຄວາມຮັ່ງມີ ແຕ່ເສັ້ນທາງກົງກັນຂ້າມນັ້ນ ບໍ່ເກີດຂຶ້ນໄດ້ເລີ້ຍປານໃດ. ບໍ່ມີສັງຄົມໃດ ຍົກເວັ້ນສັງຄົມຊາວ ຟີລິບປິນທີ່ມີຮູບພາບທາງສັງຄົມຈະແຈ້ງ ຂອງຊາວບ້ານຮັ່ງມີຜູ້ນຶ່ງ ທີ່ຍົກຖານະຕົນ ຂຶ້ນລະດັບສູງໄດ້ ກໍແຕ່ ດ້ວຍການສະສົມຊັບສົມບັດເທົ່ານັ້ນ. ເສັ້ນທາງສູ່ສະຖານະອັນສູງສົ່ງ ແມ່ນຊາດກໍາ ເນີດຜູ້ຄົນທີ່ຄົບຄ້າສະມາຄົມນໍາ ມີຄວາມຮູ້ດ້ານປັດຊະຍາຍົ່ງຈີ້ ເຄັ່ງຄັດໃນພຸດທະສາສະຫນາ ຫລື ຮຽນຮູ້ ສາສະຫນາ ອິສະລາມ. ຄວາມຍິ່ງໃຫຍ່ຂອງກະສັດ ສະແດງອອກດ້ວຍການມີກໍາລັງທະຫານ ຢ່າງບໍລິບູນ ມີຜູ້ຈົງຮັກພັກດີ ມີນາຍຊ່າງສີມືດີ ມີຂ້າລາຊະການ ແລະນາງສະຫນົມຢູ່ໃນວັງ ຕາມຫົວເມືອງຕ່າງໆ ຫລາຍກວ່າການມີຊັບ ສົມບັດເປັນ ວັດຖຸ ຫລື ເງິນຄໍາ.

ຢູ່ໃນສັງຄົມຊາວອາຊີອາຄະເນ ພໍ່ຄ້າພານິດ ຊາວບ້ານ ມັກເປັນຜູ້ຄ້າຂະຫນາດນ້ອຍທີ່ດໍາເນີນ ທຸລະກິດແບບພໍແຕ່ກຸ້ມຢູ່ກຸ້ມກິນ ແລະງອຍຢູ່ກາງເວທາສັງຄົມແຄບໆ ລະຫວ່າງ ຂຸນນາງ ແລະຊາວນາ. ເກືອບຢູ່ທົ່ວທຸກແຫ່ງ ຍົກເວັ້ນຢູ່ໃນຫມູ່ເກາະດອນອິສະລາມ ພວກເຂົາຍັງຄົງເປັນພໍ່ຄ້ານ້ອຍທີ່ຫລົບຊ້ອນ ຢູ່ພາຍໃຕ້ເງົາຂອງຊຸມຊົນຄ້າຂາຍ ຊາວອົບພະຍົບທີ່ນັບມື້ນັບເຕີບໃຫຍ່ ແລະພວກເຂົາກໍມີບົດບາດຫນ້ອຍ ທີ່ສຸດ ຢູ່ໃນອຸດສາຫະກໍາສິ່ງອອກ.

ໄດ້ຫລາຍສະຕະວັດມາແລ້ວ ພວກພໍ່ຄ້າຊາວຂາຍ ມີບົດບາດສໍາຄັນຫລາຍກວ່ານີ້ ຢູ່ໃນຊຸມຊົນ ຂະຫນາດໃຫຍ່ຂອງໂລກ ມາລາຢູ-ອິສະລາມ. ການຄ້າຂາຍມີຄວາມສໍາຄັນຫລາຍກວ່າ ຢູ່ໃນຫລາຍຍົ່ງ ເຂດນັ້ນ ໂດຍມີຖານະເປັນຊາວມຸສລິມ ພວກພໍ່ຄ້າ ມີເຫດຜົນທາງດ້ານສາສະຫນາ ເພື່ອຫາເງິນ ທັງນີ້ ເພື່ອໃຫ້ສາມາດເດີນທາງໄປຮ່ວມພິທີຮາຊ໌(haj)ທີ່ເມືອງເມກະ ແລະເມື່ອກັບມາ ພວກເຂົາ ກໍໄດ້ຊື່ວ່າເປັນ ຮາຊີ (haji) ແລ້ວ ພວກເຂົາກໍມີຄວາມປະເອີບໃຈຍິ່ງຂຶ້ນນໍາກຽດຕິຍົດນັ້ນ. ຕໍ່ມາອີກຫລາຍປີ ໃນຍຸກການ ສິ່ງອອກເບັ່ງບານ ພໍ່ຄ້າຈໍາພວກນີ້ຍັງຄົງມີບົດບາດສໍາຄັນຢູ່ໃນການຄ້າສິ່ງອອກມະຍົກມະຍ່ອຍຂອງຫມູ່ ເກາະດອນ ໂດຍການເກັບກູ້ເຄື່ອງປ່າຂອງດົງຈາກປ່າດົງນຶ່ງ ແລະເຄື່ອງທະເລບ່ອນລະ ເລັກບ່ອນລະນ້ອຍ ແລ້ວຈັດສິ່ງໄປໄວ້ສາງເຊັ່ນຢູ່ສິງກະໂປ. ຢູ່ໃນພາກກາງຂອງສຸມາຕຣາ ແລະບໍນຽວກ້ໍາໃຕ້ ພວກເຂົາເປັນ ຄູ່ຕໍ່ສູ້ຜູ້ມີໄຊເຫນືອພໍ່ຄ້າຈີນ ໃນຖານະພໍ່ຄ້າຄົນກາງ ຢູ່ໃນການຊື້ຂາຍຢາງພາຣາ ຈາກເຈົ້າຂອງລາຍຍ່ອຍ. ຢູ່ເທິງດອນຊະວາ ພວກເຂົາຄອບຄອງເລື່ອງການຄ້າພາຍໃນລະດັບລຸ່ມ ແລະເປັນຜູ້ເລີ່ມຕົ້ນ ຢູ່ໃນຫລາຍ

ເສັ້ນສາຍຂອງອຸດສາຫະກຳພາຍໃນ ຕົ້ນຕໍແມ່ນການຜະລິດຜ້າພິມບາຕິກແບບສຳເລັດຮູບ ແລະ ຢາດູດ ກຣິເຕັກ.

ແຕ່ຢູ່ທົ່ວທຸກແຫ່ງ ພວກພໍ່ຄ້າສັນຕຣິເຫລົ່ານີ້ ປະຕິບັດການຢູ່ແຕ່ໃນຂອບເຂດນອກໆຂອງເສັ້ນ ທາງຄ້າຂາຍ ເປີດທາງໃຫ້ທຸລະກິດຂອງຊາວຈີນແຊກເຂົ້າເລິກ ແລະກວ້າງຂວາງຫລາຍກວ່າຢູ່ໃນສູນ ກາງການຄ້າທັ້ງຫລາຍ. ເຄື່ອງປ່າຂອງດົງ ກັບຢາງພາຣາຈາກຜູ້ຜະຫລິດຍ່ອຍ ຖືກກວາດຊື້ ແລະສົ່ງ ໄປທາງທະເລ ເປັນຈຳນວນມະຫາສານໂດຍບໍລິສັດຈີນ(ຖ້າບໍ່ແມ່ນ ບໍລິສັດເອີຣົບ). ຜູ້ຜະຫລິດຜ້າພິມບາ ຕິກ ແລະຢາດດູດກຣິເຕັກ ຊື້ວັດຖຸດິບຈາກພໍ່ຄ້າຮັບເຫມົາຊາວຈີນ, ພໍ່ຄ້າສັນຕຣິ ຢູ່ໃນເຂດຊົນນະບົດຂອງຊະ ວາຂາຍຫົວຜັກບົ່ວ ຖົ່ວເຫລືອງຂອງຕົນໃຫ້ພໍ່ຄ້າຂາຍສົ່ງຊາວຈີນ. ກຽວກັບຜາກົດການນີ້ກໍໄດ້ມີການໃຫ້ ເຫດຜົນຫລາຍແນວ. ພໍ່ຄ້າສັນຕຣິລົ້ງເຄີຍກັບການຕໍ່ສູ້ເພື່ອການບໍລິໂພກແບບພໍ່ຢູ່ພໍກິນ ຫນ້ອຍກວ່າພວກ ພໍ່ຄ້າຈີນ ພວກເຂົາຈຶ່ງບໍ່ມີຄວາມກະຕືລືລົ້ນຫລາຍ. ພວກເຂົາບໍ່ມີບົດຮຽນຄືກັບຊາວຈີນ ໃນເລື່ອງການໃຫ້ ສິນເຊື່ອການຕະຫລາດສາກົນ ແລະແງ່ມຸມອື່ນໆຂອງການຄ້າຂາຍລະດັບກວ້າງ. ນອກຈາກນີ້ແລ້ວ ຈັນຍາທຳ ຄ້າຂາຍຂອງພວກເຂົາກໍຍັງແມ່ນ ແບບເອກະເທດອ້ອຍຕ້ອຍ ໃນຂະນະທີ່ພໍ່ຄ້າຊາວຈີນ ດຳເນີນ ທຸລະກິດ ຂອງພວກເຂົາ ຜ່ານສາຍຍາດພີ່ນ້ອງຢ່າງກວ້າງຂວາງ, ມີສະມາຄົມລັບ ແລະສະມາຄົມນັກ ເວົ້າ. ດັ່ງນັ້ນ ຈຶ່ງມີພໍ່ຄ້າຫນຸ່ມຊາວມີນັງກາໂບຜູ້ມີທຶນຮອນຄ້າຂາຍໜ້ອຍທີ່ຢາກຫາເງິນ, ພວກພໍ່ຄ້າພະເນ ຈອນ ຊາວປາເລັມບັງທີ່ຍ້າງບຸປ່າຜ່າພູຢູ່ທາງທິດຕາເວັນຕົກຂອງຊະວາ, ພໍ່ຄ້າຊາວບູກິສ ທີ່ຍາມໃດ ກໍຢູ່ ກັບ ເປຣາຣູ ຂອງພວກເຂົາ, ຜູ້ຄົນເຫລົ່ານີ້ ໃນທີ່ສຸດກໍຕ້ອງມາຕິດຕໍ່ເຈລະຈາກັບຕາຫນ່າງການຄ້າ ທີ່ ກວ້າງຂວາງເຂັ້ມ ແຂງກວ່າ ເຊິ່ງກໍເຕີບໃຫຍ່ຈາກຮ້ານຂາຍເຄື່ອງຊາວຈີນຢູ່ໃນເມືອງ ແລະຕາມທ່າເຮືອ ໃຫຍ່.

ໃນທີ່ສຸດ ພວກຂຸນນາງ ແລະເຈົ້າຊີວິດ ໃນພາກພື້ນອາຊີອາຄະເນ ກໍເກີດມີຄວາມສົນໃຈ ເພື່ອຕົນ ເອງໃນລະດັບໃດນຶ່ງ ໃນເລື່ອງການຄ້າສົ່ງອອກ ແຕ່ຢ່າງໃດກໍຕາມສຳລັບພວກສຸລະຕານ ຕາມເກາະດອນ ກັບພວກຫົວຫນ້າເຜົ່າແລ້ວ ເຫັນວ່າມັນເປັນພຽງເລື່ອງຍິບຍ່ອຍເສີມໃສ່ທຸລະກິດພື້ນຖານ ເຊັ່ນການເກັບ ກວາດເອົາເຂົ້າ ແລະແຮງງານຈາກຊາວນາຂອງຕົນເທົ່ານັ້ນ. ແມ່ນແຕ່ເຈົ້າຊີວິດສະຫຍາມ ກັບພວກຂຸນ ນາງ ເຊິ່ງກໍມີຄວາມສົນໃຈແຮງໃນເລື່ອງການຄ້າສົ່ງອອກ ນັບແຕ່ສະຕະວັດທີສິບເຈັດມາຮອດກາງສະຕະ ວັດ ທີສິບເກົ້າ ກໍຍັງມີຫນ້ອຍ ທີ່ອອກມາຈັບວຽກການຄ້າສົ່ງອອກໂດຍຕົນເອງໂດຍກົງ. ແຕ່ໃນຕົວຈິງພວກ ເພິ່ນມັກມອບສິດທາງການເມືອງ ໃຫ້ແກ່ການຜະຫລິດຂອງຊາວນາ ແລະຕໍ່ມາກໍໃຫ້ທຶນຮອນ ຈຳນວນນຶ່ງ ແກ່ພໍ່ຄ້າຊາວຈີນ ແລະມສະລິມຜູ້ເກັບຊື້ສິນຄ້າ ແລະເປັນຜູ້ດຳເນີນການຄ້າແທ້ໆ. ສຳລັບຊັ້ນນຳ ແລະເຈົ້າ ນາຍລະດັບແຂວງນັ້ນ ເພື່ອບີບຄັ້ນເອົາຜົນປະໂຫຍດຈາກພວກພໍ່ຄ້າ ໃຫ້ໄດ້ຫລາຍ ທີ່ສຸດເທົ່າທີ່ຈະຫລາຍໄດ້ ຕາມສິດອັນຊອບທຳຂອງພວກເພິ່ນນັ້ນ ແມ່ນສິ່ງທີ່ສອດຄ່ອງ ກັບຄ່ານິຍົມຜູ້ນຳ ຢູ່ໃນສັງຄົມແບ່ງຊັ້ນອັນ ຊັບຊ້ອນແບບນີ້. ແຕ່ສຳລັບພວກຂຸນນາງຫວຽດນາມ, ພວກປຣິຍາຢິຊະວາ ແລະພັກພວກສ່ວນໃຫຍ່ ການ ຄ້າຂາຍແມ່ນວຽກງານສຳລັບຜູ້ຊາຍຈຳນວນຫນ້ອຍດຽວ. ການເຂົ້າຍຶດຄອງ ໂດຍຊາວເອີຣົບ ໄດ້ນຳມາ ເຊິ່ງອະວະສານ ແກ່ການຂູດຮີດແບບເຄີຍເຮັດຕໍ່ພໍ່ຄ້າຊາວຂາຍ ແລະສົນທິສັນຍາອັນບໍ່ຍຸຕິທຳ ກໍໄດ້ມີຜົນ ຢ່າງດຽວກັນຕໍ່ການປະກອບສ່ວນອັນຈິງຈັງ ສ້າງສັນທີ່ສຸດຂອງຊົນຊັ້ນນຳໃນສະຫຍາມ. ອີງໃສ່ທັດສະນະ ທ່າທີຂອງພວກເພິ່ນ ມັນບໍ່ໄດ້ເຮັດໃຫ້ພວກເພິ່ນເອນອຽງຮັບເອົາບົດບາດ ອັນໃຫມ່ກວ່າ ແລະໂດຍກົງກວ່າ ຢູ່ໃນອຸດສາຫະກຳສົ່ງອອກທີ່ພວມເຕີບໃຫຍ່. ລຸນຫລັງຕໍ່ມາອີກຫລາຍຮຸ່ນຄົນ ເມື່ອໄດ້ເປັນເອກະລາດແລ້ວພໍ ພວກສືບທອດແລະລັດຊະທາຍາດ ຈຶ່ງໄດ້ກັບມາມີບົດບາດ ອີກເທື່ອນຶ່ງ ໃນການເກັບສ່ວຍ ຈາກການຄ້າ ສົ່ງອອກ ແລະທຶນຮອນທີ່ໄຫລເຂົ້າມາໃນປະເທດ.

ມີຂອບຂີດຈຳກັດຢູ່ຫລາຍອັນຕໍ່ຄວາມມຸ່ງຫວັງ ຫລືຄວາມອາດສາມາດຂອງຊາວອາຊີ ອາຄະເນ ທຸກຊົນຊັ້ນ ແລະໃນທຸກພາກພື້ນເພື່ອຕອບສະຫນອງໃຫ້ທັນກັບກາລະໂອກາດ ທີ່ໄຂກວ້າງໃຫ້ໂດຍຕະຫລາດ ທີ່ພວມເຕີບໃຫຍ່ສຳລັບການສົ່ງອອກຜົນຜະຫລິດອຸປະໂພກເຂດຮ້ອນຊຸ່ມ. ຄວາມສາມາດເຫນັງຕີງອັນຈຳ

ກັດຂອງພວກເຂົາ ໃນເລື່ອງເສດຖະກິດ ຕໍ່ໜ້າການປະຕິວັດເສດຖະກິດໂລກ ມີຄວາມສຳຄັນໂດຍພື້ນຖານ ຢ່າງນຶ່ງເພາະມັນໄດ້ໄຂປະຕູກວ້າງໃຫ້ແກ ຊາວອົບພະຍົບ ຜູ້ຮັບເໝົາຊາວຈີນ, ອິນເດັຽ ແລະ ເອີຣົບ ເຮັດ ໃຫ້ພວກເຂົາກາຍເປັນຜູ້ມີບົດບາດ ແບບບໍ່ເຄີຍມີມາກ່ອນ ໃນສັງຄົມຊາວອາຊີອາຄະເນ.

ຊາວຈີນຜູ້ຖືກດຶງດູດເຂົ້າມາໃນອາຊີອາຄະເນ ສ່ວນໃຫຍ່ມາຈາກເຂດຊາຍຝັ່ງທະເລ ຂອງແຂວງ ກວາງຕຸງແລະຟູກຽນ. ເຖິງແມ່ນວ່າທັງໝົດເປັນຄົນຈີນ ແຕ່ກໍແບ່ງແຍກກັນອອກເປັນກຸ່ມຕາມຕະກູນ ພາ ສາ(ແຊ) ເຊັ່ນ ຕະກູນພາສາກວາງຕຸງ ຮົກກຽນ ຮັກກາ ແຕ້ຈິ ວ ແລະຮາຍນາມ ເຊິ່ງເປັນພາສາປາກເວົ້າ ທີ່ບໍ່ສາມາດຟັງເຂົ້າໃຈກັນໄດ້ ແລະກະທັ ງປະເພນີຮີດຄອ ງ ແລະຄວາມຊຳນານໃນເລື່ອ ງ ເສດຖະກິດກໍ ແຕກຕ່າ ງກັນ ນອກຈາກນີ້ກໍຍັ ງມັກຕັ້ ງໂຕເປັນສັດຕູຄູ່ແຂ ງກັນອີ ກ. ແຕ່ໃນນັ້ນພວກເຂົ າກໍມີລັ ກສະນະພຶ ດຕິ ກຳສຳຄັນບາ ງຢ່ າ ງຄ້ າ ຍຄື ກັ ນ. ຊາ ວ ຈີ ນ ມີ ບົ ດ ຮຽ ນ ເລື ອ ງ ເສ ດ ຖະ ກິ ດ ກ ານ ຕະ ຫ ລ າ ດ ອັ ນ ຊັ ບ ຊ້ ອ ນ ມ າ ແ ຕ່ ດົ ນ ນ ານ ແ ລ້ ວ ໂ ດ ຍ ກ ານ ນ ຳ ໃ ຊ້ ເ ງິ ນ ສິ ດ ກ ານ ສິ ນ ເ ຊື່ ອ ກ ານ ຜ ະ ລິ ດ ສິ ນ ຄ້ າ ສ ຳ ເ ລັ ດ ຮູ ບ ຂ ະ ຫ ນ າ ດ ໃ ຫ ຍ່ , ກ ານ ຄ້ າ ຂ າ ຍ ເ ພື່ ອ ກ້ ມ ຕົ ນ ເ ອ ງ ໃ ນ ລ ະ ດັ ບ ທ້ ອ ງ ຖິ່ ນ ແ ລ ະ ກ ານ ຄ້ າ ທ າ ງ ໄ ກ . ເ ລື່ ອ ງ ນີ້ ປ າ ກ ົ ດ ຢ ູ່ ທ ົ ່ ວ ໄ ປ ໃ ນ ເ ຂ ດ ຊ າ ຍ ຝ ັ ່ ງ ທ ະ ເ ລ ຈ ີ ນ ກ ້ ຳ ໃ ຕ ້ ໂ ດ ຍ ມ ີ ປ ະ ຫ ວ ັ ດ ສ າ ດ ຍ າ ວ ນ ານ ພ ັ ນ ປ ີ ໃ ນ ຖ ານ ະ ເ ປ ັ ນ ເ ຂ ດ ແ ດ ນ ທ ີ ່ ຖ ື ກ ຄ ອ ບ ຄ ອ ງ ທ າ ງ ເ ສ ດ ຖ ະ ກ ິ ດ ດ ້ ວ ຍ ກ ານ ຄ ້ າ ກ ັ ບ ອ າ ຊ ີ ອ າ ຄ ະ ເ ນ ທ ີ ່ ພ ວ ກ ເ ຂ ົ າ ເ ອ ີ ້ ນ ກ ັ ນ ວ າ ນ ານ ຢ ່ າ ງ . ທ າ ງ ຊ າ ຍ ຝ ັ ່ ງ ທ ະ ເ ລ ກ ້ ຳ ໃ ຕ ້ ຂ ອ ງ ຈ ີ ນ ຄ ວ າ ມ ແ ຕ ກ ຕ ່ າ ງ ດ ້ ານ ກ ານ ຄ ້ າ ທ າ ງ ທ ະ ເ ລ ແ ລ ະ ປ ະ ເ ພ ນ ີ ກ ານ ຄ ້ າ ຂ າ ຍ ໄ ດ ້ ເ ຕ ີ ບ ໃ ຫ ຍ ່ ແ ຜ ່ ລ າ ມ ມ າ ໄ ດ ້ ຫ ລ າ ຍ ສ ະ ຕ ະ ວ ັ ດ ແ ລ ້ ວ . ໃ ນ ປ ະ ເ ທ ດ ຈ ີ ນ ຮ ູ ບ ແ ບ ບ ກ ານ ດ ຳ ລ ົ ງ ຊ ີ ວ ິ ດ ຂ ອ ງ ພ ່ ໍ ຄ ້ າ ໄ ດ ້ ຮ ັ ບ ຄ ວ າ ມ ຍ ້ ອ ງ ຍ ໍ ສ ະ ເ ສ ີ ນ ຄ ວ າ ມ ຊ ຳ ນ ານ ໃ ນ ກ ານ ຄ ້ າ ຂ າ ຍ ຂ ອ ງ ພ ວ ກ ເ ຂ ົ າ ຂ ະ ຫ ຍ າ ຍ ຕ ົ ວ ຂ ຶ ້ ນ ສ ູ ງ ກ ວ ່ າ ແ ລ ະ ກ ານ ພ ອ ກ ພ ູ ນ ຊ ັ ບ ສ ິ ນ ກ ໍ ເ ປ ັ ນ ສ ິ ່ ງ ທ ີ ່ ຕ ້ ອ ງ ຍ ົ ນ ຍ ອ ຍ ຈ ິ ງ ຈ ັ ງ ຫ ລ າ ຍ ກ ວ ່ າ ຫ ມ ູ .

ໃນຕອນຕົ້ນໆພວກພໍ່ຄ້າຊາວຈີນໃນພາກພື້ນ ດຳເນີນການຄ້າຂາຍສ່ວນໃຫຍ່ ຕາມແຄມຝັ່ງທະເລ ຂອງອາຊີອາຄະເນ ໂດຍທົ່ວໄປມັກພັກແຮມຢູ່ຫລາຍເດືອນຕາມທ່າເຮືອເມືອງໃຫຍ່ໆ ເພື່ອລໍຖ້າລົມມໍລະ ສຸມປ່ຽນທິດທາ ງ ມີພຽ ງ ແຕ່ຫນ້ ອ ຍ ດຽ ວ ເທົ່ ານ ັ ້ ນ ທ ີ ່ ຕ ັ ້ ງ ຮ າ ກ ຖ ານ ຢ ູ ່ ກ ັ ບ ທ ່ າ ເ ຮ ື ອ . ໃ ນ ລ ະ ຍ ະ ສ ະ ຕ ະ ວ ັ ດ ທ ີ ສ ິ ບ ເ ຈ ັ ດ ແ ລ ະ ສ ິ ບ ແ ປ ດ ຂ ະ ນ ະ ທ ີ ່ ກ ານ ຄ ້ າ ຂ າ ຍ ໃ ນ ອ າ ຊ ີ ອ າ ຄ ະ ເ ນ ພ ວ ມ ເ ຕ ີ ບ ໃ ຫ ຍ ່ ຊ າ ວ ຈ ີ ນ ໄ ດ ້ ເ ຂ ົ ້ າ ມ າ ຕ ັ ້ ງ ຮ າ ກ ຖ ານ ຫ ລ າ ຍ ຂ ຶ ້ ນ ໂ ດ ຍ ສ ະ ເ ພ າ ະ ໃ ນ ຂ ົ ງ ເ ຂ ດ ທ ີ ່ ໂ ອ ກ າ ດ ທ າ ງ ເ ສ ດ ຖ ະ ກ ິ ດ ມ ີ ທ ່ າ ດ ີ ຫ ລ າ ຍ ເ ຊ ັ ່ ນ : ໃ ນ ສ ະ ຫ ຍ າ ມ ອ ້ ອ ມ ແ ອ ້ ມ ບ າ ງ ກ ອ ກ ແ ລ ະ ໃ ນ ພ າ ກ ໃ ຕ ້ ບ ່ ອ ນ ທ ີ ່ ພ ວ ກ ເ ຂ ົ າ ໄ ດ ້ ຮ ່ ວ ມ ມ ື ກ ັ ບ ພ ວ ກ ເ ຊ ື ້ ອ ເ ຈ ້ ົ າ ເ ຮ ັ ດ ທ ຸ ລ ະ ກ ິ ດ ຄ ້ າ ຂ າ ຍ ແ ລ ະ ຂ ຸ ດ ຄ ົ ້ ນ ແ ຮ ่ ຊ ຶ ນ ; ຢ ู ่ ຊ ะ ວ า ພ ว ก เ ข ้ า จ ั ด ต ั ้ ง ท ุ ล ะ ก ิ ด ซ ื ้ อ ข า ย พ ิ ก ไ ห ข อ ง ป ั น ต ั ม เ ม ื ่ อ ส ะ ต ะ ว ั ด ท ี ส ิ บ เ จ ั ด แ ล ะ ไ ด ้ ธ ุ ่ ง เ ร ื ่ อ ง ม า ธ อ ด ส ะ ไ ห ม ย ู ่ พ า ย ใ ต ้ ล ะ บ อ บ ว ิ ไ อ ซ ี (V.O.C.) ໂ ດ ຍ ປ ູ ກ ອ ้ ອ ย ແ ล ะ เ ก ็ บ ผ า ส ิ ก ะ ส ิ ก ำ , ย ู ่ ม ะ น ิ ล า ພ ว ก เ ข ้ า ถ ู ก ด ึ ง ด ู ด ย ้ อ น โ ล ห ะ เ ง ิ น ข อ ง ข ะ บ ว น เ ร ื อ ใ บ ล ่ ม . ต ะ ห ล อ ด ล ะ ย ะ ข อ ง ส ะ ต ะ ว ั ด ท ี ส ิ บ เ ก ้ า ຈ ำ ນ ວ ນ ພ ่ ໍ ຄ ້ າ ຊ າ ວ ຈ ີ ນ ເ ພ ิ ่ ม ห ล า ย ข ึ ้ น เ ล ื ้ อ ย ๆ . ห ล ั ง จ า ก ป ี 1870 ก ะ แ ส อ ิ บ พ ะ ย ิ บ ก า ย เ ป ั น ก ะ แ ส ນ ้ ຳ ນ ອ ง ห ล า ย ข ึ ้ น น ำ ท ุ ก ๆ ท ิ ด ส ะ ว ั ด จ ิ บ ธ อ ด ป ี 1930 ป ะ ม า ณ ว ่ า ม ี ช า ว จ ี น เ ถ ิ ง ส ิ บ ล ้ า น ค น ท ร ็ อ เ ข ้ า ອ ອ ก ແ ล ะ ห ล า ย ล ้ า น ค น ต ั ้ ง ร า ก ฐ า น ย ่ า ง ถ า ว ร ย ู ่ ใ ນ อ า ซ ี ต า เ ว ັ ນ ອ ອ ก ส ຽ ง ใ ต ้ .

ການອົບພະຍົບໄດ້ຮັບຄວາມສະດວກສະບາຍຫລາຍ ຍ້ອນມີເຮືອຈັກອາຍນ້ ຳເຂ ົ້ າມ າ ໃ ຫ ້ ບ ໍ ລ ິ ກ ານ ຢ ່ າ ງ ພ ຽ ງ ພ ໍ . ເ ຫ ດ ຜ ົ ນ ນ ຶ ່ ງ ຢ ู ่ ເ ບ ื ้ อ ง ห ล ั ง ก ็ แ ม ่ น จ ำ น ว น พ ล ะ เ ม ื อ ง ไ ด ้ ท ะ ว ี ข ึ ้ น ย ่ า ง ม ะ ห า ส า น ย ู ่ ใ น จ ี น เ ม ื ่ อ ส ะ ต ะ ว ั ด ท ี ส ิ บ แ ป ด ต ิ ด ต า ม ด ้ ว ย ก ານ ก ่ ໍ ຂ ะ ບ ิ ด ไ ต ้ ผ ิ ว ใ ນ ล ะ ห ว ่ า ง ก า ง ส ะ ต ะ ว ั ด ท ี ส ิ บ เ ก ้ า ແ ล ะ ค ว า ม ส ั บ ส ิ น อ ุ ่ น อ า ย ท ี ่ ส ื บ ต ่ ม า . ย ่ า ง ใ ด ก ็ ต า ม เ ห ม ื อ ส ิ ่ ง อ ื ่ น ใ ด ท ั ้ ง ห ม ด ก า ร ท ี ่ ช า ว จ ี น ถ ู ก ด ั น อ อ ก ม า ก ็ แ ม ่ น ย ้ อ น เ ง ื ่ อ น ไ ข ส ะ พ า บ ข อ ง อ า ซ ี อ า ค ะ เ ນ ເ ອ ງ ທ ี ่ ເ ປ ັ ນ ແ ດ ນ ດ ິ ນ ແ ຫ ่ ง ກ າ ล ะ โ ອ ก า ด .

ມີຢູ່ຫນ້ ອ ຍ ບ ່ ອ ນ ທ ี ่ ຊ า ว จ ี น ต ั ้ ง ร า ก ฐ า น ด ้ ว ย ก า น เ ป ั น ช า ว น า ເ ຊ ັ ່ ນ ວ ່ າ ຢ ู ่ ໃ ກ ้ ๆ ບ า ง ก อ ก แ ล ะ ບ ัด ต า เ ว ัຽ , ต า ม ล ่ อ ง แ ม ่ น ้ ำ เ ธ จ ั ง ก ้ ำ ล ุ ม ย ู ่ ช า ธ า ว ั ก , ย ู ่ ท า ง ก ้ ำ ต า เ ว ัน อ อ ก ส ຽ ง เ ห ม ื อ ข อ ง ห ว ຽ ด น า ม พ า ก เ ห ม ื อ . ท ำ อ ิ ด ช า ว จ ี น บ า ง ค น เ ข ้ า ม า ใ น ฐ า น ะ พ ่ ໍ ค ้ า แ ล ้ ว ห ย ั บ ย ้ า ย ไ ป ต า ม เ ส ้ น ท า ง ก า น ค ้ า ข า ย ข อ ง ต ็ บ ม า แ ต ่ เ ม ื อ ง ช า ย ฝ ั ่ ง ท ะ เ ล จ ี น . แ ต ่ จ ำ น ว น ห ล า ย เ ด ิ น ท า ง เ ข ้ า ม า ด ้ ว ย ก า น บ ร ุ ด แ ห ย ้ ก ั บ ย ู ่ ใ น เ ร ื อ อ ิ น ส ิ ่ ง ก ุ ล ิ ใ น ฐ า น ะ ก ำ ม ะ ก อ น แ บ ก ห า ม ท ำ ม ะ ด า , ด ้ ว ย ก า น เ ป ั น ห น ี ้ เ ง ิ น

ຜ່ານທາງ ນຳຜູ້ທີ່ພວກເຂົາມາເຮັດວຽກນຳທຳອິດ. ພວກເຂົາເຂົ້າມາເພື່ອເຮັດວຽກຢູ່ສວນຂອງ ພວກເອີຣົບ ໃນດອນສຸມາຕຣາ ກ້ຳຕາເວັນອອກ, ເພື່ອສ້າງທາງລົດໄຟ 2000 ໄມລ໌ຂອງສະຫຍາມ, ເພື່ອເຮັດວຽກຢູ່ສາງ ເກັບມ້ຽນແຮ່ຊີ້ນ ຢູ່ສະຫຍາມພາກໃຕ້, ມະລາຢາ, ບັງກາ ແລະບີລິນຕັນ ແລະເຮັດຢູ່ສາງເກັບມ້ຽນ ໂລຫະເງິນ ແຮ່ກົ່ວ ຢູ່ພະມ້າ ແລະ ເພື່ອເຮັດວຽກສາລະພັດວຽກຢູ່ຕາມເມືອງທ່າເຮືອ ແລະໃນຕົວເມືອງ ຕ່າງໆຂອງອາຊີຕາເວັນອອກສຽງໃຕ້ ບ່ວ່າກຳມະກອນແບກຫາມ ຂົນສິ່ງຢູ່ໂຮງເລື່ອຍ, ໂຮງສີເຂົ້າ ແລະອາຄານການຄ້າ ຈຳນວນ ຫນ້ອຍນຶ່ງທີ່ຕັ້ງຮາກຖານ ແລະຢູ່ເປັນຊາວນານັ້ນ ພົບເຫັນຢູ່ແຕ່ໃນເຂດ ດິນຫວ່າງເປົ່າ ແລະ ສະແດງບອກພຽງແຕ່ວ່າ ມີການເຫນັງຕີງເຄື່ອນຍ້າຍ ດ້ານພູມສາດເທົ່ານັ້ນ. ແຕ່ສ່ວນທີ່ເຫລືອຈຳນວນໃຫຍ່ ມີການເຄື່ອນເຫນັງທັງທາງດ້ານ ເສດຖະກິດ ແລະພູມສາດ ໂດຍມຸ່ງຫນ້າສູ່ປ່ອງທາງໃຫມ່ໆ ບ່ອນທີ່ຊາວອາຊີອາຄະເນບ່ຢູ່ຫລາຍ. ການເຄື່ອນເຫນັງຂອງຫລາຍຄົນໄດ້ນຳພາ ພວກເຂົາໄປອ່າວໄກແດ, ພວກເຂົາສ່ວນໃຫຍ່ ຕັ້ງໃຈວ່າຈະຢູ່ພຽງສອງສາມປີ ທ້ອນເງິນແລ້ວກໍກັບບ້ານ ແລະສ່ວນໃຫຍ່ກໍໄດ້ເຮັດແຕ່ແບບນີ້. ຢ່າງໃດກໍດີ ພວກທີ່ຍັງຢູ່ ບ່ຊ້າກໍໄວ ໄດ້ກ້າວໄປຫນ້າກວ່ານັ້ນ ພວກເຂົາກາຍເປັນເຈົ້າຂອງຮ້ານຄ້າ ຢູ່ໃນຕົວເມືອງ ຫລື ບ້ານຊົນນະບົດ ຫລື ເປັນພ່ໍຄ້າມືກາງ ຢູ່ໃນທຸລະກິດສົ່ງອອກ ທີ່ພວມເຕີບໃຫຍ່ ແລະພ້ອມດຽວກັນ ກໍຕັ້ງຖິ່ນຖານແຕ່ງດອງຢູ່ທີ່ນັ້ນ ເຊິ່ງມັກບ່ມັກ ກໍໄດ້ກາຍເປັນເຮືອນຮັ່ງແຫ່ງໃຫມ່ຂອງພວກເຂົາ.

ເຊັ່ນດຽວກັບ ຊາວຈີນ ຊາວອິນເດັຽມາຈາກດິນແດນອັ່ງແຫນ້ນເກີນຂີດ ພ້ອມດ້ວຍປະຫວັດສາດອັນຍາວນານ ໃນເລື່ອງການຜະຫລິດສິນຄ້າສຳເລັດຮູບ ໃນເລື່ອງການຄ້າຂາຍທີ່ສະຫລັບຊັບຊ້ອນກວ້າງຂວາງ ແລະໃນເລື່ອງເສດຖະກິດເງິນຕາ. ການອົບພະຍົບຂອງພວກເຂົາໃນທ້າຍສະຕະວັດທີສິບເກົ້າ ບ່ໄດ້ປາກົດຕົວຂຶ້ນຢ່າງເປັນທຳມະຊາດ ຄືກັນກັບປະຫວັດສາດອັນຍາວນານຂອງພວກຄົນຈີນ. ພ່ໍຄ້າຈາກຫລາຍເຂດຂອງອິນເດັຽ ເຄີຍທຳມາຄ້າຂາຍກັບອາຊີອາຄະເນມາແລ້ວ ສ່ວນຫລາຍ ແມ່ນການຂາຍຜ້າແພຈາກອິນເດັຽ ແລະເຮັດມາດົນນານກວ່າພ່ໍຄ້າຈີນຫລາຍຮ້ານຂາຍຜ້າແຂກອິນເດັຽ ໄດ້ກາຍເປັນລັກສະນະສະເພາະອັນນຶ່ງຂອງຫລາຍໆຕົວເມືອງໃຫຍ່ ໃນພາກພື້ນອາຊີອາຄະເນ. ແຕ່ກໍມີຊາວອິນເດັຽກຸ່ມໃຫມ່ທີ່ປະກອບກັນເປັນກຸ່ມອົບພະຍົບຂະຫນາດໃຫຍ່ ໃນຍຸກອານານິຄົມຂຶ້ນສູງ ແລະເກືອບທັງຫມົດຂອງພວກເຂົາເຂົ້າໄປຢູ່ພະມ້າ ແລະມະລາຢາ ທີ່ຕົກເປັນຂອງອັງກິດ ໂດຍປະຕິບັດຕາມເສັ້ນທາງການພົວພັນແບບຈັກກະພັດໃຫມ່ ຫລາຍກວ່າໄປຕາມແນວທາງ ຂະຫຍາຍອຳນາດທາງທະເລແບບເດີມ ຂອງພວກເຂົາ. ເຊັ່ນດຽວກັນ ຊາວອິນເດັຽອົບພະຍົບຍຶດຫມັ້ນໃນເລື່ອງວິຊາສະເພາະທາງເສດຖະກິດ ຂອງພວກເຂົາຍິ່ງກວ່າຊາວຈີນອີກ. ຊາວອິນເດັຽອົບພະຍົບກຸ່ມສຳຄັນກວ່າຫມູ ແມ່ນພວກ ເຈຕຕະຍາຣ໌ (chettyars) ຈາກອິນເດັຽພາກໃຕ້ ເປັນຊົນຊັ້ນອອກເງິນຢືມ ເຊິ່ງຕ່ໍມາໄດ້ມີບົດບາດຕັດສິນ ຢູ່ໃນອຸດສາຫະກຳ ການສົ່ງເຂົ້າອອກຂອງພະມ້າ ແລະພວກທິລູກູສ ກັບ ທະມິນລ໌ ເຊິ່ງໄປຢູ່ພະມ້າ ແລະມະລາຢາ ໃນຖານະກຳມະກອນ ແຕ່ບ່ຄືກັບພວກພ່ໍຄ້າຊາວຈີນ ມີຫນ້ອຍຄົນ ໄດ້ກາຍເປັນເຈົ້າຂອງຮ້ານຄ້າ. ອັນສຸດທ້າຍ ຄົນອິນເດັຽອົບພະຍົບຈຳນວນສຳຄັນເຕີບທີ່ຍ້າຍໄປຢູ່ພະມ້າ ແລະມະລາຢາໃນຖານະກຳມະກອນ, ລູກຈ້າງບັນຊີ ແລະເຮັດວຽກບໍລິການອື່ນໆ ເຊິ່ງຜ່ານມາ ລ້ວນເຄີຍກັບລະບົບການປົກຄອງແບບອັງກິດ ດີຢູ່ແລ້ວ ທັງມີຄວາມຮູ້ດ້ານພາສາອັງກິດເປັນທຶນ ຈຶ່ງຄ່ອຍໆເກີດມີຂະບວນກຳມະກອນຄໍເສື້ອຂາວ ເຊິ່ງພ່ໍຄ້າຊາວຈີນບ່ມີທາງທຽບເທົ່າໄດ້ເລີຍ.

ຊາວອົບພະຍົບກຸ່ມສຸດທ້າຍທີ່ແຫ່ກັນມາ ຕອບສະຫນອງໂອກາດໃຫມ່ໆທາງເສດຖະກິດ ຢູ່ໃນອາຊີອາຄະເນ ແມ່ນຊາວຕາເວັນຕົກ. ການອົບພະຍົບຂອງພວກເຂົາ ເປັນເລື່ອງທີ່ແຜ່ກະຈາຍຫລາຍ ໃນຍຸກນັ້ນ ແລະເປັນທີ່ຮູ້ຈັກກັນດີ. ເປັນທີ່ສັງເກດໄດ້ຢ່າງຈະແຈ້ງວ່າ ພວກເຂົາມີອິດສະຫລະໃນ ການລົງມືປະຕິບັດວຽກງານເສດຖະກິດຂອງຕົນເອງຫລາຍກວ່າ ພວກພ່ໍຄ້າຈີນ ແລະອິນເດັຽ ດ້ວຍວ່າ ພວກເຂົາມາເຖິງໂດຍປາສະຈາກຂໍ້ຜູກມັດກັບວຽກງານ ມີທຶນຮອນ ແລະຄວາມຮູ້ວິທະຍາສາດຫລາຍກວ່າ ແລະຮູ້ສວຍໃຊ້ສາຍສຳພັນກັບລະບອບອານານິຄົມ ໃນທັນທີທີ່ມາຮອດ.

ອຸດສາຫະກຳສິ່ງອອກທີ່ເຕີບໃຫຍ່ຂະຫຍາຍຕົວຢູ່ໃນຫລາຍພາກຂອງອາຊີອາຄະເນ ໂດຍສະເພາະ ໃນລະຍະຫົກສິບປີລຸນຫລັງຄ.ສ.1870 ນັ້ນ ມີຫລາຍຮູບແບບ. ສິນຄ້າສິ່ງອອກ ຂຶ້ນຢູ່ກັບ ປະເພດດິນປູກຝັ່ງ, ສິດທິໃນການໃຊ້ທີ່ດິນ ແລະແນວພັນ, ການນຳໃຊ້ທຶນຮອນ ເຄື່ອງກົນຈັກທີ່ແຕກຕ່າງກັນ ແລະຂຶ້ນກັບວ່າ ມັນຖືກດຳເນີນການໂດຍສະມາຊິກກຸ່ມຊົນຊາດຕ່າງກັນ ແຕ່ປະສົມປະສານ ອົງປະກອບທັງຫມົດ ເປັນວິທີ ການອັນແຕກຕ່າງກັນ. ເຖິງວ່າເຄື່ອງອຸປະໂພກເປັນຮ້ອຍໆຊະນິດ ທີ່ສິ່ງອອກໃນຍຸກນັ້ນແຕກຕ່າງກັນ ສ່ວນ ໃຫຍ່ກໍແມ່ນວັດຖຸດິບກະສິກຳ ແລະແຮ່ທາດ, ລະບົບອັນຫລາກຫລາຍພາຍມາກທີ່ສິນຄ້າອຸປະໂພກ ເຫລົ່ານີ້ ຖືກຜະຫລິດອອກ ແລະລົງສູ່ຕະຫລາດ ສາມາດຈັດສັນຮູບແບບພື້ນຖານໃຫ້ຫນ້ອຍລົງໄດ້. ຮູບແບບສຳຄັນ ກວ່າຫມູ່ມີ ສີ່ແບບຄື: ນາຍທຶນນ້ອຍຈີນ, ນາຍທຶນແບບຕາເວັນຕົກ, ຊາວນາ ກັບພໍ່ຄ້າມືກາງ ແລະແບບ ນາຍທຶນຕາເວັນຕົກ ທີ່ໃຊ້ແຮງ ງານທ້ອງຖິ່ນ ຫລາຍກວ່າຊາວອົບພະຍົບ.

## ນາຍທຶນນ້ອຍຈີນ

ຄວາມພໍໃຈ ໃນເລື່ອງເສດຖະກິດ ຂອງຊາວນາຢູ່ພາກພື້ນອາຊີອາຄະເນ ໃນການຕອບສະຫນອງ ຕໍ່ແນວຈູງໃຈໃຫມ່ໆ ມີແຕ່ຢູ່ພາຍໃນຂອບເຂດບ້ານ ບໍ່ແມ່ນການຍອມຮັບເອົາແຮງງານຈາກພາຍນອກ ເຂົ້າມາຢ່າງສະມ່ຳສະເຫມີ ຈຶ່ງເປັນທຳມະດາ ທີ່ຊາວອົບພະຍົບຈີນ ຕ້ອງໄດ້ຍຶດເອົາບົດບາດໃນດ້ານ ເສດ ຖະກິດເຂົ້າໄວ້ຕື່ມ. ຈັ່ງຊັ້ນພໍ່ຄ້າຈີນຈຶ່ງວາງໂຕເປັນຄົນກາງເພື່ອສົ່ງຜົນຜະຫລິດກະສິກຳອອກໃຫ້ຊາວນາໃນ ຂະນະທີ່ແຮງງານຊາວຈີນໂດຍທົ່ວໄປມັກຂ້ອນອັ່ງກັນຢູ່ໃນເຂດບໍລິການອຸດສາຫະກຳ, ການຂົນສົ່ນຄ້າຂຶ້ນ ລົງເຮືອ ແລະເປັນກຳມະກອນກໍ່ສ້າງທາງລົດໄຟ ເຊິ່ງເປັນວຽກງານ ທີ່ຊາວອາຊີ ຕາເວັນອອກສຽງໃຕ້ ບໍ່ສົນໃຈມາແຕ່ດົນ. ມີກໍລະນີຍົກເວັ້ນແດ່ກໍແຕ່ໃນເຂດທີ່ປະຊາຊົນດັ້ງເດີມມີຫນ້ອຍເທົ່ານັ້ນ. ມີຫລາຍບ່ອນ ເປັນແບບນີ້ ຈຶ່ງຄ່ອຍໆເກີດມີສັງຄົມຊາວຈີນນ້ອຍໆ ຈັດຕັ້ງກັນຂຶ້ນຕາມ "ຮີ" ຫລືສາຍຕະກູນ ແລະອີງໃສ່ ເສດຖະກິດອຸດສາຫະກຳສິ່ງອອກຂອງພວກຕົນເອງເປັນພື້ນຖານ. ອຸດສາຫະກຳໃນຂັ້ນທຳອິດເຊັ່ນ ການປູກ ພິກໄທຂອງຊາວຈີນ ຢູ່ກຳປົດ ແລະ ສິງກະໂປ ການຂຸດຄົ້ນບໍ່ຄຳຢູ່ບໍ່ນຮົວຕາເວັນອອກ ແລະການປູກອ້ອຍ ຢູ່ພາກຕາເວັນອອກສຽງໃຕ້ສະຫຍາມ ກໍຄ່ອຍໆຕົກຕ່ຳຕາມກາລະເວລາ. ແຕ່ການຂຸດຄົ້ນບໍ່ຊຶ່ນຂອງຊາວ ຈີນຕາມແນວສາຍພູພູເກັດ ຂຶ້ນມາພາກໃຕ້ຂອງໄທ ຮອດ ນິກຣີ ຊຳບີລັງ ໃນພາກໃຕ້ ຂອງຫມູ່ເກາະດອນ ໄດ້ສືບຕໍ່ຮຸ່ງເຮືອງຢ່າງຫນັກແຫນ້ນຕະຫລອດເວລາຂອງຍຸກການສົ່ງອອກເບັ່ງບານ ແລະຫລັງຈາກນັ້ນ ຕໍ່ມາ. ຫລັງຈາກປີ 1870 ການຂຸດຄົ້ນບໍ່ແຮ່ຊຶ່ນຂອງຈີນ ໃນສະຫຍາມ ແລະ ມະລາຢາໄດ້ກໍ່ຮ່າງເປັນ ໂຕຕົນຂຶ້ນ ມີຫົວຫນ່ວຍການຜະຫລິດຍ່ອຍຫລາຍບ່ອນຈັດຕັ້ງເຂົ້າຮ່ວມທຶນກັນ ຫລືເຮັດບໍລິສັດຂະຫນາດ ນ້ອຍ ແລ້ວວິທີການຂຸດຄົ້ນບໍ່ແຮ່ແບບໃຊ້ແຮງງານຫນັກ ກໍເປັນໄປໄດ້ດ້ວຍການມີກອງທຸນແຮງງານ ອົບພະຍົບລາຄາຖືກຈຳນວນຫລາຍ. ກຳມະກອນບໍ່ແຮ່ຊາວ ຈີນໄດ້ປ່ຽນແປງບາງສິ່ງບາງຢ່າງເຊັ່ນ ໃນ ມະລາຢາມາຮອດທ້າຍສະຕະວັດ ກຳມະກອນສ່ວນໃຫຍ່ຫັນມານິຍົມໃຊ້ເຄື່ອງດູດຈັກອາຍນ້ຳ ຂອງເອີຣົບ ທີ່ມີປະສິດທິພາບກວ່າ ແຕ່ມີການປ່ຽນແປງກໍແຕ່ໃນບ່ອນທີ່ພໍເຂົ້າກັນໄດ້ກັບຫົວຫນ່ວຍທັງຫລາຍເຊິ່ງ ກໍ່ຕັ້ງ ແລ້ວ ແລະມີການໃຊ້ແຮງງານຫນັກ. ຄວາມບໍ່ພໍໃຈຂອງພວກເຂົາ ຫລື ຄວາມບໍ່ສາມາດປັບແປງເຂົ້າ ກັບການປ່ຽນແປງ ຂະຫນາດໃຫຍ່ເກີດເປັນປັນຫາສຳຄັນຂຶ້ນ ເມື່ອບໍລິສັດນາຍທຶນໃຫຍ່ຂອງເອີຣົບ ກ້າວ ເຂົ້າມາໃນທຸລະກິດແຮ່ ຊຶ່ນ ລະຫວ່າງທ້າຍສະຕະວັດທີສິບເກົ້າ ແລະຕົ້ນສະຕະວັດທີຊາວ. ພວກເຂົາສ້າງ ເຕົາຫລອມຊຶ່ນ ຂະຫນາດໃຫຍ່ທັນສະໄຫມຢູ່ປີນັງ ແລະ ສິງກະໂປ ແລະມາຮອດລະຫວ່າງປີ 1920 ກໍຂັບ ໄລ່ເຕົາຫລອມຂະຫນາດນ້ອຍຂອງຊາວຈີນ ໃນພາກໃຕ້ຂອງສະຫຍາມຕົກອອກຈາກວົງການທຸລະກິດ ອັນ ຈຳໃຫ້ຕ້ອງສົ່ງແຮ່ຊຶ່ນລົງ ໄປທາງໃຕ້ໂດຍທາງທະເລ. ສິ່ງສຳຄັນກວ່ານີ້ກໍແມ່ນວ່າເຈົ້າຂອງບໍ່ແຮ່ ບໍ່ສົນໃຈ ນຳການໃຊ້ເຄື່ອງຈັກດູດລ້າງບໍ່ ທີ່ພວກອັງກິດ ແລະອົດສເຕຣເລຽ ນຳເຂົ້າມາຫລັງປີ 1900. ທຳອິດ ພວກ

ເຂົ້າບໍ່ສາມາດຫາເງິນ ມາຊື້ເຄື່ອງຈັກຂະຫນາດໃຫຍ່ ແລະແພງແບບນັ້ນໄດ້ ແຕ່ປາກົດວ່າ ພວກເຂົ້າບໍ່ທັນ ກຽມຕົວພຽງພໍ ເພື່ອຈະປ່ຽນຮັບເອົາຮູບແບບອຸດສາຫະກຳທີ່ບໍ່ທັນຮູ້ຈັກດີນັ້ນເທື່ອ: ມີບໍລິສັດຂະຫນາດໃຫຍ່ ຈຳນວນຫນ້ອຍນຶ່ງ ທີ່ໃຊ້ເງິນທຶນຫລາຍ ແລະໃຊ້ແຮງງານແຕ່ຫນ້ອຍດຽວ. ລະຫວ່າງກາງຊຸມປີ 1920 ແລະກາງຊຸມປີ 1930 ທັງຢູ່ໃນສະຫຍາມ ທັງຢູ່ມະລາຢາ ປະລິມານຜົນຜະຫລິດແຮ່ ຈາກການນຳໃຊ້ຈັກ ຖືດລ້າງບໍ່ ຂອງເອີຣົບ ໂດດຈາກນຶ່ງສ່ວນສາມມາເປັນປະມານສອງສ່ວນສາມຂອງການຜະຫລິດຊືນ ທັງ ຫມົດ. ການຜະລິດຂອງຊາວຈີນ ກໍຖືວ່າໄປໄດ້ດີສົມຄວນ ເມື່ອສົມທຽບໃສ່ກັບລະດັບການຜະຫລິດ ໃນສະຕະ ວັດທີສິບເກົ້າ ແຕ່ອຸດສາ ຫະກຳໄດ້ແຍກອອກເປັນສອງຮູບແບບຢ່າງຂາດຂັ້ນອັນນຶ່ງ ແບບຂອງນາຍ ທຶນນ້ອຍຊາວຈີນ ແລະອີກອັນນຶ່ງ ແມ່ນແບບຂອງນາຍທຶນໃຫຍ່ຊາວຕາເວັນຕົກ.

## ນາຍທຶນຕາເວັນຕົກ

ຮູບແບບການຜະຫລິດຂອງພວກນາຍທຶນຕາເວັນຕົກ ມີລັກສະນະເດັ່ນຢູ່ບ່ອນວ່າ ຫົວຫນ່ວຍງານ ກ້ວ້າງໃຫຍ່ ຢູ່ພາຍໃຕ້ການບໍລິຫານດຽວ ຈ້າງແຮງງານ ລົງທຶນເປັນເງິນຕາ ແລະນຳໃຊ້ວິທີການທີ່ມີ ວິທະຍາສາດ ເບິ່ງໃນທຸກແງ່ທຸກມຸມແລ້ວ ແມ່ນແຕກຕ່າງຢ່າງຂາດຂັ້ນ ກັບຮູບແບບການຜະຫລິດ ທີ່ມີ ມາແຕ່ກ່ອນໃນພາກພື້ນອາຊີຕາເວັນອອກສຽງໃຕ້. ດ້ວຍເຫດຜົນນີ້ ຢູ່ໃນຫລາຍຂົງເຂດ ທີ່ຮູບແບບ ນີ້ໄດ້ ເຂົ້າມາກໍ່ຕັ້ງຂຶ້ນໃນຊຸມປີລຸນຫລັງ 1870 ຈຶ່ງບໍ່ແມ່ນການເຕີບໃຫຍ່ຕາມທຳມະຊາດ ດ້ວຍກິດຈະກຳທາງ ເສດຖະກິດທ້ອງຖິ່ນ ແຕ່ຫາກຖືກນຳເຂົ້າມາຈາກຕ່າງປະເທດ ແລະດຳເນີນການທັງຫມົດ ໂດຍຊາວ ຕາເວັນຕົກ.

ມາຮອດຕົ້ນສະຕະວັດທີຊາວ ໃນຄວາມເປັນຈິງແລ້ວ ການສົ່ງອອກທາດແຮ່ທີ່ສຳຄັນ ຂອງອາຊີ ອາຄະເນ ແມ່ນດຳເນີນການໂດຍບໍລິສັດຕາເວັນຕົກ ໂດຍຊົມໃຊ້ທຶນຮອນຂອງພວກນາຍທຶນນ້ອຍຕ້ອຍ. ຍົກ ເວັ້ນເປັນພິເສດກໍລະນີການຂຸດຄົ້ນແຮ່ຊືນຢູ່ສະຫຍາມ ກັບ ມະລາຢາ. ນອກຈາກມີການຜະຫລິດແຮ່ຊືນ ໂດຍນາຍທຶນຕາເວັນຕົກ ຢູ່ປະເທດເຫລົ່ານີ້ແລ້ວ ຍັງມີຢູ່ໃນຫມູ່ເກາະດອນບັງກາ ແລະ ບີລິນຕັນ ນອກ ສຸມາຕຣາອີກ, ການຜະຫລິດນ້ຳມັນຢູ່ ພະມ້າ ສຸມາຕຣາ ແລະບໍນຽວ, ບໍ່ຖ່ານຫີນ ຢູ່ ຮົ່ງກາຍ ໃນຫວຽດ ນາມພາກເຫນືອ, ຄຳ ຢູ່ລູຊອນ ແລະແຮ່ທາດອື່ນໆຢູ່ ເມົາຈີ ກັບບໍ່ແຮ່ທີ່ ເບົາວິນ ໃນພະມ້າ. ຂະນະທີ່ແຕ ກ່ອນ ການຂຸດຄົ້ນບໍ່ແຮ ຂອງບັນດາປະເທດໃນອາຊີຕາເວັນອອກສຽງໃຕ້ ຫລື ຊາວຈີນ ໄດ້ກະທຳກັນໃນ ລະດັບນ້ອຍ, ຕໍ່ມາການຜະຫລິດແຮ່ທາດຂະຫນາດໃຫຍ່ ດຳເນີນການໂດຍ ບໍລິສັດໃຫຍ່ ຂອງພວກເອີຣົບ ໄດ້ເຂົ້າມາຄອບຄອງເປັນເຈົ້າ. ດັ່ງນັ້ນການຜະຫລິດແຮ່ທາດສ່ວນໃຫຍ່ຈຶ່ງຮຽກຮ້ອງ ການນຳໃຊ້ເຄື່ອງກົນ ຈັກຫນັກ ເຕັກໂນໂລຢີອັນກ້າວຫນ້າເຊິ່ງກໍຕ້ອງອາໄສວິທີການທີ່ໃຊ້ເງິນລົງທຶນ ຈຳນວນມະຫາສານນຳ. ສິ່ງທີ່ຫນ້າສົນໃຈກໍຄື ເຫັນໄດ້ວ່າ ໄດ້ມີການນຳໃຊ້ວິທີການແບບດຽວກັນນີ້ຢ່າງກ້ວ້າງຂວາງ ໃນການສົ່ງ ອອກຜະຫລິດຜົນກະສິກຳ ເຊິ່ງຜ່ານມາ ບໍ່ເຄີຍມີການນຳໃຊ້ເພື່ອເສດຖະກິດແບບນີ້ເລີຍ ໃນຍຸກດຽວກັນນີ້ ຜົນ ທີ່ໄດ້ຮັບກໍຄື ມີຊາວນາຫລາຍລ້ານຄົນ ເຮັດວຽກງານຂອງຕົນ ໄດ້ຢ່າງແຂງຂັນ.

ເພື່ອໃຫ້ເຂົ້າໃຈທີ່ຕັ້ງຂອງນາຍທຶນກະສິກຳ ໂດຍສະເພາະ ຢູ່ໃນເຂດປູກຝັງຂອງອາຊີຕາເວັນອອກ ສຽງໃຕ້ ເຮົາຈະຕ້ອງໄດ້ພິຈາລະນາວ່າ ມັນໄດ້ ຂະຫຍາຍຕົວຢູ່ບ່ອນໃດ. ຍົກເວັ້ນການຜະຫລິດນ້ຳຕານເຊິ່ງ ມັກເປັນກໍລະນີພິເສດຢູ່ແລ້ວ ການປູກຝັງບໍ່ໄດ້ຂະຫຍາຍຕົວ ຢູ່ໃນເຂດທີ່ມີປະຊາຊົນຫນາແຫນ້ນຂອງອາຊີ ຕາເວັນອອກສຽງໃຕ້ ເຊິ່ງເວລານັ້ນດິນແດນສ່ວນນີ້ມີຊາວນາເປັນເຈົ້າຂອງທີ່ດິນ ເຮັດໄຮ່ເຮັດນາພໍກຸ້ມຢູ່ກິນ ແລະໃນຫລາຍກໍລະນີ ພວກເຂົ້າໄດ້ພັດທະນາການຜະຫລິດເພື່ອສົ່ງອອກຂອງຕົນເອງແລ້ວ.

ພວກນາຍທຶນຮັບເຫມົາຊາວຕາເວັນຕົກ ໄດ້ປັບປ່ຽນຕົນເອງເຂົ້າກັບສະພາບຕົວຈິງໄດ້ຢ່າງທັນການ ຄື ກັບທີ່ຊາວຈີນເຮັດມາແລ້ວ. ດັ່ງນັ້ນພວກເຂົ້າຈຶ່ງຕັ້ງເຂດ ການປູກຝັງຂອງພວກເຂົ້າໃສ່ບ່ອນມີຄົນຫນ້ອຍ

ໂດຍສະເພາະໃນເຂດຊາຍຝັ່ງຕາເວັນຕົກມະລາຢາ,ຊາຍຝັ່ງຕາເວັນອອກຂອງສຸມາຕຣາ ແລະເຂດສ່ວນພາຍໃນພາກຕາເວັນຕົກ ແລະຕາເວັນອອກຂອງຊະວາໃນດອນມິນດາເນົາ ແລະຢູ່ໃນເຂດພູດອຍກ້ຳໃນຂອງຫວຽດນາມ ແລະກຳພູຊາ.

ປະຫວັດຂອງ ອັນທີ່ກາຍມາເປັນເຂດເຣຊິດັນຊີ ແຫ່ງຊາຍຝັ່ງຕາເວັນອອກ ຂອງສຸມາຕຣາ-ພື້ນທີ່ສີ່ລ່ຽມ ຍາວຂະໜານດຍາວ 150 ໄມລ໌ ແລະກ້ວາງ 50ໄມລ໌ ຕັ້ງຢູ່ໃຈກາງເມືອງສະໄໝໃໝ່ ເມດານ ແມ່ນຕົວຢ່າງອັນດັ້ງເດີມນຶ່ງແຫ່ງການຕີບໃຫຍ່ຂອງລະບົບເຂດປູກຝັ່ງ. ໃນປີ 1863 ເມື່ອຊາຍພະເນຈອນ ຊາວດັດຊ໌ ຊາວສວນຢາດູດ ຜູ້ນຶ່ງຊື່ ທ້າວ ຈາກໍບຸສ ນຽນຮູຍ ມາເຖິງທີ່ນັ້ນ ເຂດດິນ ນີ້ ກໍຄ້າຍຄືກັບຊາຍຝັ່ງທະເລປະເທດໃກ້ຄຽງທັ້ງສອງຂ້າງຂອງຊ່ອງແຄບມາລະກາ: ມັນແມ່ນດິນແດນຂອງເຈົ້າປົກຄອງນ້ອຍສຸລະຕານ ແລະບັນດາຫົວໜ້າເຜົ່າທີ່ຢັ່ງຢາຍໄປຕາມລຽບຝັ່ງແມ່ນ້ຳ, ປະຊາຊົນທີ່ປາກເວົ້າພາສາ ມາເລ ປູກເຂົ້າໄຮ່ ເປັນສິນຄ້າຕົ້ນຕໍ ແລະສິ່ງອອກໜາກພິກໄທແດ່ເລັກນ້ອຍ ຮວມທັງເຄື່ອງປ່າຂອງດົງ ອື່ນໆນຳ. ແຕ່ດິນເຂດນີ້ອຸດົມສົມບູນເກີນຄາດ ແລະທ່ານສຸລະຕານ ກໍພໍໃຈແລກປ່ຽນກັບເງິນລາຍປີ ກ້ອນໃຫຍ່ເພື່ອເຊັນສັນຍາມອບດິນດອນຕອນກວ້າງໃຫ້ທ້າວນຽນຮູຍ ແລະຊາວສວນຢາຜູ້ອື່ນໆ ທີ່ຕິດຕາມເຂົ້າມາ. ການປູກຢາດູດຈະເລີນຮຸ່ງເຮືອງ ແລະຫັນປ່ຽນມາເປັນກອກຢາຊິການ ຄຸນນະພາບດີ ທີ່ແຜ່ລາມ ແລະພົບເຫັນໄດ້ໃນທົ່ວຕົວເມືອງໃຫມ່ເມດັນ. ມາຮອດກາງຊຸມປີ 1890 ແລະຕໍ່ມາອີກ ຈຶ່ງມີການປູກພືດພັນ ແນວໃຫມ່ ຕື່ມ ເຊັ່ນ ກາເຟ, ຊາ, ປາມນ້ຳມັນ ແລະຫລາຍກວ່າໜຶ່ງໜົ່ນ ແມ່ນ ຢາງພາຣາ ແລ້ວຈາກນັ້ນ ແຜ່ນດິນທີ່ຫວ່າງເປົ່າ ເກືອບເຄິ່ງກໍຄ່ອຍໆກາຍ ເປັນພື້ນທີ່ປູກຝັ່ງຕິດຕໍ່ກັນຍາວຍືດ. ເມດັນກາຍເປັນເມືອງ ແລະດ້ວຍທ່າເຮືອ ບີລາວັນ ເດລີ ໄດ້ສົ່ງອອກສິນຄ້າຕ່າງໆເຖິງປະມານນຶ່ງສ່ວນສີ່ຂອງເຄື່ອງຜະລິດໄດ້ ໃນໜູ່ເກາະດອນອິນດີສ໌ເນເຫີແລນ ທັງໜົດຫລືຫລາຍກວ່ານັ້ນກໍ່ວ່າໄດ້ ໃນລະຍະກ່ອນການລະເບີດ ສົງຄາມໂລກຄັ້ງທີສອງ.

ລະບົບການປູກຝັ່ງຂອງເຂດເຣຊິດັນຊີຊາຍຝັ່ງຕາເວັນອອກ ໄດ້ນຳເຂົ້າທຸກສິ່ງທຸກຢ່າງ ຍົກເວັ້ນທີ່ດິນ ແລະບັນດາທ່ານສຸລະຕານ ຂີ້ໂລບ ຄືວ່າ: ຊາວສວນເອງ (ມີທັງຄົນ ດັດຊ໌ ອັງກິດ ອາເມຣິກາ ແລະ ແບລຊິກ) ການລົງທຶນຂອງພວກເຂົາ (ປະມານ 250 ລ້ານໂດລາ ໃນປີ1929), ເຕັກໂນໂລຍີວິທະຍາສາດ ຂອງພວກເຂົາ ແລະສິ່ງສຳຄັນສຸດ ອາດຈະແມ່ນກຳມະກອນທີ່ມີອາຫານການກິນຫລວງຫລາຍ. ແຕ່ເດີມ ປະຊາຊົນທ້ອງຖິ່ນມີຢູ່ແຕ່ປະມານຫມື່ນປາຍຄົນເທົ່ານັ້ນ ແລະຫລາຍຄົນກໍຫາກມີການກິນຢູ່ພໍພຽງສົມບູນ ແລະພວກເຂົາກໍບໍ່ສົນໃຈນຳການເປັນແຮງງານຮັບຈ້າງ. ດັ່ງນັ້ນເຈົ້າຂອງສວນຈຶ່ງນຳເຂົ້າແຮງງານ ຂອງເຂົາເອງ ທຳອິດແມ່ນຊາວຈີນ ແລະມາຮອດລະຫວ່າງປີ 1890 ເມື່ອຊາວຈີນຫັນໄປນິຍົມເປີດຮ້ານຄ້າຂາຍ ແລະດຳເນີນກິດຈະການຢູ່ໃນເມືອງຫລາຍຂຶ້ນ ກໍຈຶ່ງແມ່ນຊາວຊະວາ. ມາຮອດປີ1930 ປະຊາຊົນທະວີຂຶ້ນເປັນ 1.8 ລ້ານ ໃນນັ້ນ 645,000 ຄົນແມ່ນ ຊາວຊະວາ (225,000 ຄົນ ເຮັດວຽກຢູ່ຕາມສວນ) ແລະອີກ 195,000 ຄົນ ແມ່ນຊາວຈີນ (11,000 ຄົນ ເຮັດວຽກຢູ່ສວນ) ກຳມະກອນຈຳນວນຫລວງຫລາຍດຳລົງຊີວິດຢູ່ໃນເນື້ອທີ່ປູກຝັ່ງປະມານ 8,000 ເອກເຄີ ແລະສ້າງສັງຄົມເປັນຂອງພວກເຂົາເອງດ້ວຍການປຸກສ້າງເຮືອນຢູ່ ຂອງພະນັກງານ, ແພດໝໍ, ໂຮງງານການປຸງແຕ່ງໄມ້ ແລະແນ່ນອນ ມີລະບົບກົດໝາຍ ແລະຜູ້ຄຸ້ມຄອງ (ລັດຖະບານ) ຂອງຕົນເອງ. ເຂດຊາຍຝັ່ງເຣຊິເດັນຊີກ້ຳຕາເວັນອອກ ສ້າງຕັ້ງຖິ່ນຖານ ຂອງຄົນຕ່າງດ້າວຂຶ້ນເປັນຮ້ອຍໆແຫ່ງ ແລະມັນກໍໄດ້ສົ່ງອິດທິພົນເຂັ້ມແຂງ ຕໍ່ພາກສ່ວນອື່ນໆ ໃນປະເທດໃກ້ຄຽງ ເຊັ່ນ ສຸມາຕຣາ ແລະ ມະລາຢາ.

ບໍ່ມີບ່ອນໃດ ໃນພາກພື້ນອາຊີຕາເວັນອອກສຽງໃຕ້ ທີ່ທຳການປູກຝັ່ງອັນຫລວງຫລາຍ ໄດ້ເຮັດໃຫ້ເກີດການປ່ຽນແປງອັນຍິ່ງໃຫຍ່ໃນເຂດຊາຍຝັ່ງເຣຊິເດັນຊີ(ຖິ່ນຕ່າງດ້າວ) ກ້ຳຕາເວັນອອກ ເຊິ່ງໃນນັ້ນກວ່າເຄິ່ງນຶ່ງຂອງສະມາຊິກສັງຄົມ ຄືປະມານເທົ່າກັບເຄິ່ງນຶ່ງຂອງປະຊາຊົນກຳພູຊາ ໄດ້ກໍ່ຕົວຂຶ້ນ ໃນລະຍະເວລາພຽງຫົກສິບປີ. ແຕ່ທົ່ວທຸກບ່ອນທີ່ພວກເຂົາຢູ່ ພວກເຂົາໄດ້ນຳເອົາຄວາມປ່ຽນແປງຄ້າຍຄືກັນມາໃຫ້ ໂດຍໄປຕັ້ງຖິ່ນຖານຢູ່ບ່ອນບໍ່ມີປະຊາຊົນຫນາແໜ້ນພວກເຂົາໄດ້ຕັ້ງຕົວເປັນຄືສະຖາບັນແນວໜ້າ

ໂດຍ ສ້າງຕັ້ງຫນ່ວຍພື້ນຖານເສດຖະກິດແບບໃຫມ່ ທັງກວ້າງຂວາງກວ່າ ແລະເປັນບ່ອນດຶງເອົາ ຫລື ດຶງດູດເອົາ ປະຊາຊົນຊຸດໃຫມ່ທັງຫມົດເຂົ້າມາຢູ່. ມີຫນ້ອຍກໍລະນີ ຫລືວ່າອາດເປັນບາງກໍລະນີແທ້ໆ ແລະ ສວນໃຫຍ່ກໍແມ່ນໃນເຂດຊາຍຝັ່ງຕາເວັນອອກ ແລະທາງຝັ່ງຕາເວັນຕົກຂອງ ມະລາຢາ ທີ່ກໍາມະກອນ ນໍາເຂົ້າ ເກີດຂັດແຍ່ງຮຸນແຮງກັບຄົນໃນຂົງເຂດ, ລະບົບການປູກສວນຢາງ ໄດ້ມີສ່ວນປະກອບຢ່າງສໍາຄັນ ຕໍ່ການຂະຫຍາຍຕົວຂອງສັງຄົມອັນຫລາກຫລາຍ ແລະໃນທິດທາງດຽວກັນ ກໍເປັນເຫດໃຫ້ຄວາມເຄັ່ງຕຶງ ທາງດ້ານສັງຄົມ ດໍາເນີນຕໍ່ມາ.

ການປູກສວນຢາງເລີ່ມມີບົດບາດຕັດສິນຢູ່ໃນ ມະລາຢາ ກ່ອນທີ່ຈະໄປເປັນຢູ່ໃນເຂດຊ່ອງແຄບ ທາງຊາຍຝັ່ງຕາເວັນອອກ ເຮຊິເດັນຊີ ແລະມັນກໍໄດ້ສ້າງຕົວຂຶ້ນບົນພື້ນຖານເສດຖະກິດນຶ່ງເຊິ່ງຊາວຈີນ ກໍາມະກອນບໍ່ແຮ່ຊືນປູໄວ້ແລ້ວ. ການປູກຢາງຂອງຊາວມະລາຢາ ແມ່ນສິ່ງທໍາອິດທີ່ຕອບສະຫນອງຄວາມ ຕ້ອງການຢາງພາຣາຂອງໂລກທີ່ທະວີຂຶ້ນແຮງຢ່າງໄວວາລຸນຫລັງປີ 1900. ໃນສາມສິບປີທໍາອິດແຫ່ງຍຸກ ເບັ່ງບານຂອງສະຕະວັດທີຊາວນັ້ນ, ການປູກຢາງ ແມ່ນການກະສິກໍາທີ່ຄອບຄອງ ອັນດັບນຶ່ງໃນກະສິກໍາ ຂອງ ມະລາຢາ ແລະແນ່ນອນວ່າ ເປັນເສດຖະກິດທັງຫມົດຂອງປະເທດ. ລະຫວ່າງປີ 1905-1929 ເນື້ອທີ່ ປູກຕົ້ນຢາງ ໃນມະລາຢາ ສູງຂຶ້ນ ຈາກ 50,000 ເອເຄີຣ໌ ເປັນສາມລ້ານ ຫລືປະມານສາມເທົ່າ ຂອງ ເນື້ອທີ່ປູກເຂົ້າ ອັນເປັນພືດສໍາຄັນອັນດັບສອງ ຮອງຈາກຢາງພາຣາ. ການສົ່ງ ອອກຢາງພາຣາ ສູງຂຶ້ນ ຈາກ 6,000 ໂຕນ ໃນປີ 1910 ເປັນ 44,600 ໂຕນ ໃນປີ 1929. ປະມານ ປີ 1914 ຢາງພາຣາ ເປັນສິນຄ້າ ສົ່ງອອກຫລາຍທີ່ສຸດຂອງມະລາຢາ ເຊິ່ງສາມາດສ້າງລາຍຮັບໄດ້ ເຖິງ 27% ຂອງລາຍຮັບ ຈາກການສົ່ງ ອອກທັງຫມົດ ໃນປີ 1916 ແລະເປັນ 60% ໃນປີ 1929. ລຸນຫລັງປີ 1915 ເຈົ້າ ຂອງສວນນ້ອຍກໍໄດ້ເພີ່ມ ປະລິມານການຜະລິດຂຶ້ນຢ່າງຫລວງຫລາຍຢູ່ໃນການຜະຫລິດລວມ ມັນຈຶ່ງກາຍ ເປັນວ່າ ແມ່ນການປູກ ສວນຢາງນີ້ເອງທີ່ໄດ້ນໍາເອົາ ອົງປະກອບໃຫມ່ມາໃຫ້ແກ່ປະຊາຊົນ ມະລາຢາ ຢູ່ໃນຊຸມປີເຫລົ່ານີ້. ດັ່ງທີ່ເປັນ ຢູ່ໃນເຂດຊາຍຝັ່ງຕາເວັນອອກຂອງເຮຊິເດັນຊີ ຊາວມາເລບໍ່ໄດ້ຕ້ອງການ ຫລື ປາດຖະຫນາເປັນແຮງງານ ຮັບຈ້າງ ແຕ່ເມື່ອພວກເຂົາເຫັນທາງອອກແລ້ວການຕອບສະຫນອງຂອງ ພວກເຂົາຕໍ່ຍຸກເບັ່ງບານຂອງ ການປູກຢາງພາຣາ ຈຶ່ງແມ່ນການເປັນເຈົ້າຂອງສວນຂະຫນາດນ້ອຍ. ສ່ວນຊາວຈີນ ເຖິງວ່າມີຜູ້ໄປຮັບ ຈ້າງເຮັດສວນຢາງ ແລະທັງກໍເປັນເຈົ້າຂອງສວນຈໍານວນນຶ່ງ ແຕ່ພວກເຂົາສ່ວນຫລາຍ ກໍຍັງຢູ່ໃນທຸລະກິດ ເຮັດບໍ່ແຮ່ຊືນ ແລະການຄ້າຂາຍຂອງພວກເຂົາຕໍ່ໄປ ແລະເມື່ອພວກເຂົາຫັນມາ ປູກຢາງ ພວກເຂົາກໍກາຍ ເປັນເຈົ້າຂອງສວນຂະຫນາດກາງ. ດັ່ງນັ້ນເຈົ້າຂອງສວນຊາວ ອັງກິດຈຶ່ງຫັນມາໃຊ້ແຮງງານໄຮ້ສີມື ທີ່ມີ ເຫລືອເປັນແຮງງານສໍາຮອງ ມາຈາກພາກໃຕ້ຂອງອິນເດັຽ. ເຊັ່ນດຽວກັບຊາວຈີນ ຄົນອິນເດັຽ ຕັ້ງໃຈວ່າ ຈະມາຢູ່ບໍ່ດົນຫາເງິນສົ່ງເມືອອຸປະກາລະຄົນຢູ່ບ້ານທີ່ທຸກຈົນແລ້ວ ກັບຄືນເມືອດ້ວຍ ເງິນທ້ອນຈັກກ້ອນນຶ່ງ ແລະສ່ວນຫລວງຫລາຍ ພວກເຂົາກໍປະຕິບັດຕາມແຜນນີ້. ແລ້ວກໍເຊັ່ນດຽວກັນກັບພວກຈີນ ມີບາງຄົນ ຕັ້ງຮາກຖານຢູ່ເລີຍ. ໃນຊຸມທົດສະວັດທໍາອິດຂອງການກໍ່ຕັ້ງ ຄະນະກໍາມະການຕ່າງດ້າວອິນເດັຽ ໃນປີ 1907 ໂດຍລັດຖະບານແລະເຈົ້າຂອງສວນ ເພື່ອເບິ່ງແຍງ ຄຸ້ມຄອງຊາວອົບພະຍົບ ມີແຮງງານອິນເດັຽ 700,000 ຄົນ ເຂົ້າມາ ມະລາຢາ ແລະອອກເມືອ 480,000 ຄົນ. ດ້ວຍການເຂົ້າມາຕື່ມ ແບບສະມໍ່າ ສະເຫມີຢ່າງນີ້ ອົງປະກອບທີສາມໃນສັງຄົມອັນຫລາກຫລາຍຂອງ ມາເລ ຈຶ່ງກໍ່ຮ່າງສ້າງຕົວຂຶ້ນ.

## ຊາວນາ ແລະພໍ່ຄ້າຄົນກາງ

ມາຮອດລະຍະທ້າຍ ຄື ຮອດປີ 1929 ພີ້ ສວນຢາງຂອງພວກເອີຣົບ ແລະຕໍ່ມາ ກໍແມ່ນຂອງຊາວ ເນເທີແລນອິນດີສ ຢູ່ມະລາຢາ ໄດ້ຜະຫລິດຢາງຫລາຍຂຶ້ນໆຮອດ 50% ຂອງຜົນຜະຫລິດຢາງທັງຫມົດ ໃນໂລກ. ແຕ່ເຈົ້າຂອງສວນຢາງຂະຫນາດນ້ອຍຢູ່ໃນສອງປະເທດນີ້ ໄດ້ເລີ່ມເຮັດສວນຂະຫນາດໃຫຍ່ ລຸນ ຫລັງຕໍ່ມາສິບປີ ແລະແລ່ນນໍາຫັນຢ່າງໄວວາ. ໃນປີ 1929 ພວກເຂົາສົ່ງອອກໄດ້ຮອດ 40% ຂອງຢາງ ພາຣາທັງຫມົດໃນໂລກ. ນຶ່ງທົດສະວັດຕໍ່ມາມີຊາວສວນປະມານນຶ່ງລ້ານຄົນຢູ່ ສຸມາຕຣາ ມະລາຢາ ແລະ ບໍນຽວ ເປັນເຈົ້າຂອງພື້ນທີ່ກວ່າ ສີ່ລ້ານເອເຄີຣ໌ ທີ່ເຕັມໄປດ້ວຍຕົ້ນຢາງໃຫຍ່ພ້ອມທີ່ໃຫ້ຢາງຕາມຄວາມ ຕ້ອງການຂອງຫມົດທັງໂລກ ໃນລາຄາທີ່ເຈົ້າຂອງສວນຈໍານວນຫນ້ອຍພໍຮັບໄດ້. ແຕ່ດ້ວຍການກີດກັນຢ່າງ ຫຍາບຊ້າຫນ້າດ້ານຈາກຝ່າຍເຈົ້າອານານິຄົມ ຜູ້ຄວບຄຸມແຜນການ ສົ່ງອອກໃນຊຸມປີ 1930 ຈຶ່ງເຮັດໃຫ້ ປະເທດເຫລົ່ານີ້ ບໍ່ໄດ້ຄອບຄອງຖານະຜູ້ຜະຫລິດນຶ່ງໃນບັນດາ ສິນຄ້າສົ່ງອອກສໍາຄັນທີ່ສຸດຂອງໂລກ.

ຕົວເລກເຫລົ່ານີ້ ຊີ້ບອກເຖິງຄວາມສໍາຄັນຂອງການຫັນໄປຫາຜູ້ຜະລິດຢາງຂະຫນາດນ້ອຍ ແຕ່ ແຫລ່ງຂໍ້ມູນໃນຍຸກນັ້ນໃຫ້ຂໍ້ມູນຂ່າວສານພຽງເລັກນ້ອຍ ກ່ຽວກັບປະຫວັດສາດຂອງຂະບວນການອັນນີ້ຂອງ ຊາວນາ ແລະຄວາມຫມາຍຂອງມັນຕໍ່ສັງຄົມ ທີ່ມັນກວາດລ້າງໄປ. ຄໍາເວົ້າຊໍ່າລື ກ່ຽວກັບລາຄາ ແລະຄວາມສໍາເລັດຂອງການປູກສວນຢາງ ແລະຂອງຊາວສວນຂະຫນາດນ້ອຍ ແຜ່ກະຈາຍຢ່າງໄວວາ ແລະຊາວສວນກໍເຫັນໄດ້ໃນບໍ່ດົນວ່າ ຢາງ ແມ່ນພືດພັນຍອດຍ້ຽມທີ່ເປັນເປົ້າຫມາຍຂອງພວກເຂົາ. ຢູ່ໃນ ມະລາຢາ ລະຫວ່າງ ຊຸມປີ 1910 - 1920 ເຊິ່ງເປັນຍຸກເບັ່ງບານ ຂອງ ການປູກຢາງ, ຊຸມປີ 1920 ຢູ່ ສຸມາຕຣາ ພວກເຂົາປະຕິບັດຕາມຂໍ້ສະຫລຸບນີ້ດ້ວຍການລົງມືໃສ່ຈິງຈັງ. ຢາງແມ່ນພືດພັນຍອດຍ້ຽມດ້ວຍ ເຫດຜົນຫລາຍຢ່າງ. ບໍ່ວ່າດ້ານນິເວດວິທະຍາ ຕົ້ນຢາງເຊິ່ງເຕີບໃຫຍ່ຢ່າງແຂງແຮງຕິດຕາມທໍາມະຊາດ ຢູ່ປ່າຮ້ອນຊຸ່ມຂອງບຣາຊິນ ສາມາດປັບຕົວໄດ້ເປັນຢ່າງດີ ຢູ່ເຂດອາຊີ ໃນພື້ນດິນທີ່ບໍ່ມີຝຸ່ນຫລາຍທັງເຕັມ ໄປດ້ວຍພືດພັນຂອງປ່າດົງອາຊີຕາເວັນອອກສຽງໃຕ້. ມັນຮຽກຮ້ອງໃຫ້ກ້າເບ້ຽໃສ່ດິນບຸກເບີກດີແລ້ວ ກ່ອນ ຈະຍ້າຍໄປປູກໃສ່ໄຮສວນບ່ອນບຸກເບີກໄວ້ ແລະແມ່ນແຕ່ການນໍາເບ້ຽໄປປູກຈັກສອງ - ສາມເອເຄີຣ໌ ໃສ່ດິນ ປູກຝັງປະຈໍາ. ເມື່ອປູກແລ້ວ ຕົ້ນຢາງເຕີບໃຫຍ່ຢ່າງງ່າຍໆຄືກັບຕົ້ນໄມ້ອື່ນໃນປ່າຊັ້ນສອງ, ຕ້ອງການ ການ ເບິ່ງແຍງແຕ່ເລັກນ້ອຍ. ສ່ວນວິທີການຂີດເອົາຢາງ ກໍຮໍ່າຮຽນໄດ້ບໍ່ຍາກ.

ຢາງດິບຍັງມີຄວາມຍອດຍ້ຽມໃນດ້ານເສດຖະກິດອີກ. ລະຍະລໍຄອຍເບ້ຽນ້ອຍໆ ໃຫ້ເຕີບໃຫຍ່ນີ້ ຫລື ໃນຂະນະທີ່ລາຄາຢາງດິບຕົກຕໍ່າ ຊາວສວນຍັງສາມາດດໍາລົງຊີວິດຢູ່ໄດ້ດ້ວຍການເຮັດໄຮ່ເຂົ້າສັກໃສ່ ລະຫວ່າງຕົ້ນຢາງ. ໃນໂອກາດອໍານວຍ ຕົ້ນຢາງໃນສວນບໍ່ເທົ່າໃດ ເອເຄີຣ໌ ທີ່ເຈົ້າຂອງສວນຂີດນ້ໍາຢາງ ເອງ ສາມາດສ້າງລາຍຮັບພຽງພໍສໍາລັບຊື້ເຂົ້າໄດ້ຫລາຍກວ່າເຂົ້າທີ່ຄອບຄົວຊາວນາຄອບຄົວນຶ່ງຜະຫລິດ ໄດ້ດ້ວຍຄວາມລໍາບາກຍາກຊາຫລາຍກວ່າ ແລະ ທັງຕ້ອງຈ່າຍພາສີ ແລະຊື້ສິນຄ້ານໍາເຂົ້າອື່ນໆອີກ. ແນ ນອນວ່າຊາວນາທີ່ສົ່ງອອກຜົນຜະຫລິດ ຂອງຕົນນັ້ນຕ້ອງການພໍ່ຄ້າຄົນກາງເພື່ອຂົນຍ້າຍຢາງດິບຂອງຕົນ ໄປສູ່ຕະຫລາດ ແລະທຸລະກິດດ້ານນີ້ກໍເຕີບໃຫຍ່ຂະຫຍາຍໂຕໄວເທົ່າໆກັບ ການປູກຝັງຂອງພວກຊາວ ສວນ ນັ້ນແຫລະ ພໍ່ຄ້າຈີນ (ບາງຄັ້ງ ແມ່ນ ຊາວສຸມາຕຣາ) ໄດ້ຫຍັບຍ້າຍເຂົ້າມາດໍາເນີນການຢ່າງຕໍ່ເນື່ອງ ເພື່ອຫລິ້ນບົດບາດສໍາຮອງອັນນີ້. ຢູ່ທີ່ບ່ອນຕໍ້າໂຮມຢາງດິບຂອງຕົວເມືອງ ພວກພໍ່ຄ້າມືກາງຈັດຫາ ເຄື່ອງ ໃຊ້ອຸປະກອນລາຄາຖືກໆສໍາລັບຂົນສົ່ງຢາງດິບ ແລະຈາກທີ່ນີ້ ແຜ່ນຢາງຫນຽວຢ້ານໄຟແລ້ວກໍອອກເດີນ ທາງໄປຍັງທ່າເຮືອໃຫຍ່ໆເຊັ່ນ: ສິງກະໂປ ເຊິ່ງຢູ່ບ່ອນນີ້ເອງທີ່ຊາວສວນຂະໜາດນ້ອຍ ສົ່ງຜະຫລິດຕະພັນ ຂອງພວກເຂົາເຂົ້າມາແຕ່ລະປີປະມານ 300,000 ຫາ 400,000 ໂຕນ.

ອັນສຸດທ້າຍ ຢາງພາຣາ ຍັງມີຄວາມຍອດຍ້ຽມໃນດ້ານສັງຄົມນໍາອີກເພາະຊ່ວຍໃຫ້ຊາວນາຊາວ ສວນດໍາລົງຊີວິດຢູ່ໃນພາວະເສດຖະກິດເງິນສົດໄດ້. ເຖິງແມ່ນວ່າເຈົ້າຂອງສວນຢາງບາງຄົນຕ້ອງໄດ້ຈ້າງ

ຄົນຂີດຢາງເຂົ້າມາຊ່ອຍໃນລະດູຂີດຢາງ ແລະເຈົ້າຂອງສວນລາຍໃຫຍ່ຕ້ອງໄດ້ຈ້າງແຮງງານມາຊ່ອຍ ເປັນປະຈຳກໍຕາມ ຊາວສວນທັງຫມົດເກືອບນຶ່ງລ້ານລາຍ ຫລື ຊາວສວນລາຍນ້ອຍ ໃນຊຸມປີ 1930 ກໍເປັນ ເຈົ້າຂອງພື້ນທີ່ປູກຢາງຜູ້ລະໜ້ອຍ ແລະພວກເຂົາກໍດຳເນີນການທຸກຢ່າງດ້ວຍຕົນເອງ ແລະມີການຊ່ອຍ ເຫລືອກັນພາຍໃນສາຍຍາດພີ່ນ້ອງ. ໂດຍການເປັນເຈົ້າຂອງສວນຂະຫນາດນ້ອຍຢູ່ໃກ້ບ້ານທັງຍັງສາມາດ ສືບຕໍ່ປູກເຂົ້າ ແລະພືດພັນອື່ນໆ ໄວ້ກິນໄດ້ຢູ່ນັ້ນ ເຮັດໃຫ້ຊາວສວນມີທ່າດີກວ່າການປູກພືດດຽວເພື່ອຂາຍ ເພາະບໍ່ມີຄວາມສ່ຽງ ທັງບໍ່ໄດ້ຫ່າງຫນີຈາກສັງຄົມໃນບ້ານ. ການເຮັດສວນຢາງຈຶ່ງເປັນຫົນທາງອັນສົດໃສ ແລະເຮັດໃຫ້ເກີດຊົນຊັ້ນຊາວນາ - ພໍ່ຄ້າມືກາງໃນອຸດສາຫະກຳ ສິ່ງອອກຂຶ້ນມາ.

ໃນຍຸກຕົ້ນສະຕະວັດທີ 20 ການປູກຢາງພາຣາ ບໍ່ວ່າຂະຫນາດໃຫຍ່ ຫລື ຂະຫນາດນ້ອຍກໍກາຍ ເປັນການອຸດສາຫະກຳສິ່ງອອກທີ່ໂດດເດັ່ນກວ່າໝູ່ໃນອາຊີຕາເວັນອອກສຽງໃຕ້. ເບິ່ງແທ້ໆແລ້ວຍັງບໍ່ມີ ການສິ່ງອອກໃນປີ 1900 ແຕ່ພໍມາຮອດຊຸມປີ 1930 ແລ້ວມັນໄດ້ກາຍເປັນການສິ່ງອອກທີ່ສຳຄັນ ກວ່າໝູ່ ໂດຍທົ່ວໄປແລ້ວແມ່ນອອກຈາກ ມະລາຢາ ແລະ ເນເທີແລນອິນດີສ ຖືວ່າເປັນການສິ່ງອອກອັນສຳຄັນສຸດ ຂອງຊາວນາໃນປະເທດເຫລົ່ານີ້. ຄວາມສຳຄັນໃນລະດັບໂລກຂອງມັນຍິ່ງນັບມື້ນັບຫລາຍຂຶ້ນໃນສີ່ທົດສະວັດ ທຳອິດຂອງສະຕະວັດທີຊາວ ມະລາຢາ ແລະ ເນເທີແລນອິນດີສ ສິ່ງອອກ ຢາງພາຣາ ປະມານ 75% ຫລື ຫລາຍກວ່ານີ້ຂອງການຊົມໃຊ້ຢາງດິບໃນອາຊີອາຄະເນ ແລະປະມານ 90% ຂອງການບໍລິໂພກທັງຫມົດ ໃນທົ່ວໂລກ.

ເຂົ້າເຊິ່ງເປັນພືດສິ່ງອອກຕົ້ນຕໍອີກອັນນຶ່ງຂອງອາຊີຕາເວັນອອກສຽງໃຕ້ ມີບັນທຶກທີ່ຫນ້າສົນໃຈ ຫນ້ອຍກວ່າ. ເວົ້າກັນໃນລະດັບໂລກ ປະເທດໃນອາຊີຕາເວັນອອກສຽງໃຕ້ ຜະຫລິດເຂົ້າສິ່ງອອກໄດ້ຮອດ 70% ຫລື ຫລາຍກວ່ານີ້ຂອງການສິ່ງອອກທັງຫມົດໃນໂລກ ແຕ່ມັນນັບເປັນສ່ວນຍິບຍ່ອຍຫລາຍໃນການ ບໍລິໂພກໃນທົ່ວໂລກ. ຄວາມສຳຄັນອັນຍາວນານຂອງເຂົ້າຢູ່ໃນປະຫວັດສາດເສດຖະກິດຂອງພາກພື້ນອາຊີ ຕາເວັນອອກສຽງໃຕ້ນັ້ນມີຫລາຍກວ່າ ຢາງພາຣາ ແຮ່ຊຶນ ນ້ຳຕານ ແລະສິນຄ້າອື່ນໆ ມັນເປັນຜູ້ໄຂສັງ ກາດແຫ່ງເສດຖະກິດສິ່ງອອກ ຂອງມະລາຢາ ແລະເນເທີແລນອິນດີສ. ຢ່າງໃດກໍດີ ເຂົ້າເປັນພືດສິ່ງອອກ ຕົ້ນຕໍອັນທຳອິດຂອງ ພະມ້າ, ໄທ, ກຳພູຊາ ແລະຫວຽດນາມ ແລະມັນກໍຍັງຄົງຕົວເປັນສິນຄ້າສິ່ງອອກ ຕົ້ນຕໍຂອງພາກພື້ນນີ້ຢູ່ຕະຫລອດເວລາຕົກເປັນຫົວເມືອງຂຶ້ນ. ຕະຫລອດເວລາຜ່ານມາ ມັນຍັງຄົງເປັນພືດ ຜົນຢ່າງດຽວຂອງຊາວນາ ແລະດ້ວຍເຫດນີ້ມັນຈຶ່ງມີຄວາມສຳຄັນກວ່າໝູ່ຢູ່ໃນອຸດສາຫະກຳຂອງຊາວນາ ແລະພໍ່ຄ້າມືກາງ. ການສິ່ງອອກເຂົ້າຈຳນວນຫລວງຫລາຍຈາກ ພະມ້າ ໂກແຊງຊິນ ແລະພາກກາງຂອງ ສະຫຍາມ(ຂະເຫມນສິ່ງອອກຫນ້ອຍດຽວ) ໃນລະຫວ່າງປີ 1870 ນັ້ນ ມີລັກສະນະຮ່ວມກັນຫລາຍຢ່າງ. ການຜະຫລິດຂະຫນາດໃຫຍ່ເປັນໄປໄດ້, ທຳອິດ ມັນແມ່ນຍ້ອນວ່າບໍລິເວນສາມລ່ຽມປາກແມ່ນ້ຳອິຣະວະດີ, ແມ່ນ້ຳຂອງ ແລະແມ່ນ້ຳເຈົ້າພະຍານັ້ນ ເປັນທົ່ງຣາບທີ່ອຸດົມສົມບູນດ້ວຍຝຸ່ນຕົກຄ້າງຈາກການພັດໄຫລ ມານຳນ້ຳ ເຫມາະແກ່ການປູກເຂົ້າ ແລະບໍລິເວນເຫລົ່ານີ້ ບໍ່ເຄີຍມີຄົນມາຕັ້ງຖິ່ນຖານຢູ່ຫລາຍຈັກເທື່ອ ຍ້ອນວ່າຄວາມຈູງໃຈທີ່ຈະລະບາຍນ້ຳອອກຈາກເຂດນີ້ ບໍ່ເຄີຍມີມາກ່ອນ ບໍ່ຄືກັບບໍລິເວນສາມລ່ຽມປາກແມ່ ນ້ຳແດງ ແລະໃນຊະວາ ເຊິ່ງເປັນບ່ອນປູກເຂົ້າຢ່າງຫລວງຫລາຍ ໃນລະຍະດຽວກັນ ແຕ່ເຂດນີ້ຕ້ອງແບກ ຫາບປະຊາກອນຈຳນວນຫລາຍນຳ ດັ່ງນັ້ນຈຶ່ງບໍ່ສາມາດສິ່ງອອກຜົນຜະລິດທີ່ເຫລືອໄດ້ຫລາຍ ໃນຂະນະທີ່ ບໍລິເວນສາມລ່ຽມ ແມ່ນ້ຳ ອີກບ່ອນນຶ່ງສາມາດຜະຫລິດສິ່ງອອກຫລາຍ ທັງໆທີ່ວ່າ ແບບວິທີການປູກເຂົ້າ ບໍ່ໄດ້ປ່ຽນແປງ ຫລາຍເທົ່າໃດ. ເມື່ອຄວາມຕ້ອງການບໍລິໂພກເຂົ້າໂລກສູງຂຶ້ນ ໃນລະຫວ່າງປີ 1870 ພວກ ຊາວນາໃນບໍລິເວນ ຫລື ບ່ອນໃກ້ຄຽງ ກໍໄດ້ຕອບສະຫນອງຢ່າງຖ່ວງທັນ ໂດຍຂະຫຍັບຂະຫຍາຍເນື້ອທີ່ປູກ ຝັງອອກໄປຫາບ່ອນທີ່ບໍ່ທັນເຄີຍປູກ ແລະບາງບ່ອນກໍປູກຝັງແບບເລັ່ງລັດ(ນາແຊງ)ກວ່າ ອັນໄດ້ເຮັດໃຫ້ມີ ຜົນຜະຫລິດເຂົ້າເຫລືອສິ່ງອອກຫລາຍຂຶ້ນ. ພໍ່ຄ້າມືກາງຊາວຈີນ ອິນເດຽ ແລະຄົນທ້ອງຖິ່ນ ກໍທັນມາດຳ ເນີນການດ້ານໃຫ້ສິນເຊື່ອ ແລະການນຳເຂົ້າ ທັງເກັບຊື້ເຂົ້າໂຮມກັນໃຫ້ໄດ້ຈຳນວນຫລາຍໆເຖິງຂັ້ນຕັ້ງໂຮງ ສີສີເຂົ້າສິ່ງອອກເຂົ້າສານກໍມີ.

ທີ່ເວົ້າມານັ້ນແມ່ນຮູບແບບທົ່ວໆໄປ ຂອງອຸດສາຫະກຳການຄ້າເຂົ້າ ແຕ່ພູມຫລັງຂອງມັນມີຄວາມຊັບຊ້ອນແຕກຕ່າງກັນຫລາຍ ທັງມີພັດທະນາການດ້ານປະຫວັດສາດ ພ້ອມດ້ວຍຜົນສະທ້ອນກໍເປັນໄປແບບຕ່າງກັນຢ່າງຈະແຈ້ງຍິ່ງກວ່າຢູ່ໃນຫລາຍໆປະເທດ. ດ້ວຍວ່າອຸດສາຫະກຳການຄ້າເຂົ້າ ຢູ່ສາມລ່ຽມປາກແມ່ນ້ຳ ອິຣະວະດີ ຂອງພະມ້າມີຄວາມເປັນມາເກົ່າແກ່ ແຜ່ລາມ ແລະຊັບຊ້ອນກວ່າໝູ່ ຈຶ່ງຈະຍົກມາເປັນກໍລະນີຕົວຢ່າງໃນທີ່ນີ້. ໃນປີ 1855 ລຸນຫລັງສົງຄາມ ພະມ້າ-ອັງກິດ ຍຸຕິລົງ ແລະເມື່ອອັງກິດເຂົ້າຍຶດຄອງບໍລິເວນສາມລ່ຽມປາກແມ່ນ້ຳນັ້ນ ຄາດວ່າມີພື້ນທີ່ປູກເຂົ້າໃນເຂດສາມລ່ຽມປາກແມ່ນ້ຳຢູ່ ພະມ້າ ປະມານນຶ່ງລ້ານເອເຄີຣ໌ແລ້ວ. ມາຮອດປີ 1873 ຫລາຍຂຶ້ນອີກນຶ່ງລ້ານ ແລະນັບຈາກນັ້ນມາພື້ນທີ່ສຳລັບປູກເຂົ້າກໍໄດ້ທະວີຂຶ້ນ ປະມານນຶ່ງລ້ານເອເຄີຣ໌ ຕໍ່ທຸກໆເຈັດປີ ຈົນເປັນ 10 ລ້ານ ໃນປີ 1930. ໃນລະຍະດຽວກັນ (1855-1931) ປະຊາກອນໃນເຂດນັ້ນ ກໍຫລາຍຂຶ້ນຈາກປະມານ 1.5 ລ້ານ ເປັນປະມານ 8 ລ້ານ ເຊິ່ງໄວກວ່າການເພີ່ມຂຶ້ນຂອງປະຊາກອນໃນພາກກາງຂອງພະມ້າຮອດສອງເທົ່າ (ເຊິ່ງເປັນສາເຫດຂອງຜົນສະທ້ອນທາງສັງຄົມຂອງອຸດສາຫະກຳການສົ່ງອອກເຂົ້າ) ແຕ່ກໍໄວເທົ່າໆກັບການເພີ່ມຂຶ້ນຂອງເນື້ອທີ່ປູກຝັງເຄິ່ງນຶ່ງ (ສະມັດຖະພາບການ ຜະຫລິດໄດ້ທະວີຂຶ້ນຢ່າງບໍ່ເຄີຍມີມາກ່ອນ ເພື່ອການສົ່ງອອກ)

ປະຫວັດສາດດ້ານສັງຄົມອັນຊັບຊ້ອນ ຂອງອຸດສາຫະກຳການສົ່ງອອກເຂົ້າຢູ່ ພະມ້າ ນັບແຕ່ ປີ 1870 ຫາ 1940 ອາດແບ່ງອອກເປັນສາມຕອນ ຄື ແຕ່ປີ 1870-1900 ແມ່ນລະຍະການໄຂຊາຍແດນ; ແຕ່ປີ 1900-1929 ແມ່ນລະຍະຄວາມສຸກງອມ ແລະການປ່ຽນແປງພາຍໃນ; ແຕ່ປີ 1930-1940 ລະຍະຕົກຕ່ຳ ແລະຄວາມຫລົ້ມຈົມທາງສັງຄົມ. ຕອນທຳອິດມີເອກະລັກຢູ່ວ່າ ເນື້ອດິນດີສຳລັບປູກເຂົ້າມີຢູ່ຢ່າງພຽງພໍໃນເຂດສາມລ່ຽມປາກແມ່ນ້ຳ ໂດຍຜູ້ຈັບຈອງເຈົ້າຂອງດິນແມ່ນຄົນພະມ້າ ເອກະຊົນຂະໜາດນ້ອຍ. ຄວາມຕ້ອງການຂອງໂລກ ເຮັດໃຫ້ຜູ້ຈັດສົ່ງທາງເຮືອເອີຣົບ ກັບເຈົ້າຂອງໂຮງສີ ຕາມທ່າເຮືອຕ່າງໆ ພ້ອມທີ່ຈະຈ່າຍເງິນສົດຫລາຍຂຶ້ນເພື່ອຊື້ເຂົ້າໄວ້. ແລວທາງໜ້າຕື່ນເຕັ້ນອັນນີ້ຊຸກຍູ້ໃຫ້ມີຜູ້ເຂົ້າມາບຸກເບີກດິນໃນເຂດສາມລ່ຽມ ແລະລາມລົງມາຮອດພາກໃຕ້ ແລະຈັບຈອງເນື້ອທີ່ປູກເຂົ້າເຖິງລາຍລະ 50 ເອເຄີຣ໌. ການຈັບຈອງທີ່ດິນຂະໜາດນີ້ ຫລາຍກວ່າທີ່ຊາວນາເຄີຍເຮັດມາຕາມຮີດຄອງ ເພື່ອໃຫ້ພໍຢູ່ພໍກິນ ແລະດ້ວຍເຫດນີ້ຈຶ່ງເກີດມີຄວາມຕ້ອງການແຮງງານ ເມື່ອຕົກເຖິງລະດູເຮັດນາ ແລະແຮງງານເຫລົ່ານີ້ ກໍເດີນທາງມາຈາກພາກກາງພະມ້າເປັນສ່ວນໃຫຍ່. ນັບແຕ່ທຳອິດໆພຸ້ນແລ້ວເຊັ່ນກັນ ທີ່ອຸດສາຫະກຳການຄ້າເຂົ້າລ່ຽນໄຫລດີເພາະມີລະບົບສິນເຊື່ອອັນລະອຽດດີ ພວກເຈົ້າຂອງໂຮງສີໃຫຍ່ໆ ໃນຍ່ານກຸ້ງ ກັບປັດແສ (Bas sein) ຈ່າຍເງິນສົດລ່ວງໜ້າ ໃຫ້ພໍ່ຄ້າກວດຊື້ເຂົ້າລາຍໃຫຍ່ ແລະພວກນີ້ກໍໄປຈ່າຍຕໍ່ໃຫ້ ພວກນັກຊື້ລາຍນ້ອຍ. ພວກເຈຕຕິຢາຣ໌ ຮັບຈຳແລະອອກເງິນຢືມໃຫ້ຊາວນາຜູ້ຕ້ອງການທຶນຮອນໄປບຸກເບີກ ແລະຊື້ສັດລາກແກ່. ເຈົ້າຂອງຮ້ານຄ້າຍ່ອຍ ຊາວຈີນ ແລະ ພະມ້າ ກັບເຖົ້າແກ່ອອກເງິນຢືມ ໃຫ້ຊາວນາພະມ້າຢືມເງິນໃນລະຍະສັ້ນໆເພື່ອວ່າຈ້າງແຮງງານອົບພະຍົບ, ເພື່ອຈັດພິທີແຕ່ງດອງ ຫລື ພຽງແຕ່ ເພື່ອການຈັດງານສະແດງແບບໃດແບບນຶ່ງ. ນອນຢູ່ໃນໃຈກາງ ຂອງລະບົບສິນເຊື່ອ ແມ່ນບໍລິສັດຂອງພວກ ເຈຕຕະຢາຣ໌ ເຊິ່ງເປັນບໍລິສັດຂອງກຸ່ມນາຍທະນາຄານຜູ້ຮັກແພງສັດຊື່ຕໍ່ກັນ ແບບອ້າຍນ້ອງເຮັດວຽກ ຢ່າງມີປະສິດທິພາບ ໂດຍຮຽກເອົາດອກເບ້ຍຕ່ຳກວ່າທີ່ເຄີຍເອົາກັນໃນພະມ້າມາແຕ່ເດີມ. ເພາະວ່າ ພວກເຂົາອຸທິດຕົນໃຫ້ແກ່ ການກູ້ຢືມທີ່ແນ່ນອນປອດໄພເປັນຕົ້ນຕໍ. ເປັນເລື່ອງບໍ່ແຈ່ມແຈ້ງປານໃດທີ່ວ່າ ແມ່ນຍ້ອນການເຕີບໃຫຍ່ ໄວວາແບບພິລຶກເກີນໄປ ຂອງອຸດສາຫະກຳ ທີ່ຮຽກຮ້ອງຕ້ອງການໃຫ້ຊົມໃຊ້ລະບົບສິນເຊື່ອຫລາຍຂຶ້ນ ຫລືເປັນຍ້ອນການບໍລິການອັນໜ້າອັດສະຈັນຂອງພວກ ເຈຕຕະຢາຣ໌ ທີ່ເຮັດໃຫ້ມີການເຕີບໃຫຍ່ໄວວານີ້. ແຕ່ສິ່ງທີ່ແນ່ນອນກໍແມ່ນວ່າ ການໃຫ້ສິນເຊື່ອນີ້ ໂດຍສະເພາະການກູ້ຢືມ ຈາກພວກເຈຕຕະຢາຣ໌ ແມ່ນພື້ນຖານຂອງການເຕີບໃຫຍ່ແຫ່ງອຸດສາຫະກຳເຂົ້າໃນພະມ້າ.

ລັກສະນະສະເພາະບາງຢ່າງຂອງອຸດສາຫະກຳການຄ້າເຂົ້າໃນພະມ້າ ເປັນທີ່ຈະແຈ້ງແລ້ວ ດັ່ງມີລາຍຊື່ຜູ້ມີສ່ວນຮ່ວມທີ່ກ່າວມາຂ້າງເທິງນັ້ນ. ຄົນທ້ອງຖິ່ນ ເຈົ້າຂອງທີ່ດິນຂະໜາດນ້ອຍ, ເຖົ້າແກ່ອອກເງິນຢືມ, ຊາວອົບພະຍົບອາຊີ ແລະຜູ້ຈັດສົ່ງຊາວເອີຣົບ ຕ່າງກໍລົ້ງເຄີຍກັບອຸດສາຫະກຳຜ່ານພໍ່ຄ້າມືກາງ

ຊາວອາຊີຕາເວັນອອກສຽງໃຕ້.ແຕ່ໃນພາກໃຕ້ຂອງພະມ້າ ຊາວໄຮ່ຊາວນາ ວ່າຈ້າງແຮງງານອົບພະຍົບ ໃນຕອນຕົ້ນ ບໍ່ແມ່ນແຕ່ເພື່ອກ່ຽວເຂົ້າຄືດັ່ງທີ່ເປັນຢູ່ໃນຫລາຍກໍລະນີ ແຕ່ພວກເຂົາຈ້າງມາເຮັດວຽກອື່ນໆນຳ ເຊັ່ນ ຖາງປ່າ ແລະຄາດໄຖ ເຊິ່ງເປັນວຽກງານທີ່ກະກຽມໄວ້ດົນ ກ່ອນການເກັບກ່ຽວ ດັ່ງນັ້ນ ຈຶ່ງຕ້ອງການເງິນສົດມາໃຊ້ຈ່າຍ. ມີແຮງງານອົບພະຍົບຢູ່ສາມກຸ່ມ ໃນອາຊີ ທີ່ເຂົ້າມາອາໄສຢູ່ໃນພື້ນທີ່ເຊິ່ງເຄີຍມີຊາວຈີນຄອບຄອງຢູ່ແລ້ວ. ກຸ່ມທີນຶ່ງແມ່ນພວກເຈຕຕະຢາຣ໌ຜູ້ຊຳນານການທະນາຄານຊົນນະບົດ ແລະບໍ່ປາກົດວ່າມີບົດບາດໃດໆຢູ່ໃນການຄ້າຂາຍ.ກຸ່ມທີສອງແມ່ນຊາວອິນເດຽ (ສ່ວນໃຫຍ່ເທລູກູ) ມາເປັນລູກຈ້າງຕາມລະດູການ ເຊິ່ງໃນລະຍະນີ້ພວກເຂົາສຸມໃສ່ການເປັນແຮງງານຮັບຈ້າງຢູ່ໃນຕົວເມືອງຢ່າງດຽວ ເຊັ່ນຢູ່ໂຮງສີ ແລະແບກຫາບສິນຄ້າຂຶ້ນລົງເຮືອ ເຊິ່ງເປັນວຽກທີ່ຊາວພະມ້າບໍ່ຍອມເຮັດ. ກຸ່ມທີສາມແມ່ນເຈົ້າຂອງຮ້ານຄ້າຊາວຈີນເຊິ່ງສະແດງບົດບາດອັນຄຸ້ນເຄີຍກັນມາແລ້ວກວ່າຫມູ ຄື ອອກສິນຄ້າລ່ວງໜ້າແລ້ວເກັບເງິນຄືນ ໃນລະດູ ກ່ຽວເຂົ້າ ແຕ່ນີ້ກໍຫາກປະຕິບັດກັນຢູ່ໃນລະດັບນ້ອຍຫລາຍ ເມື່ອປຽບໃສ່ຂົງເຂດອື່ນ.

ຢ່າງໃດກໍດີ ລັກສະນະພິເສດກວ່າຫມູ່ຫມົດ ກໍແມ່ນການທີ່ພໍ່ຄ້າຊາວ ພະມ້າ ໄດ້ຮັບຄວາມໄວ້ເນື້ອເຊື່ອໃຈຢ່າງຂາດຂັ້ນໃນຖານະພໍ່ຄ້າມືກາງ ເຊິ່ງຢູ່ບ່ອນອື່ນ ແມ່ນວຽກງານຂອງຄົນຈີນອ້ອຍຕ້ອຍ ແຕ່ຕອນຕົ້ນໆພຸ້ນແລ້ວ ເຈົ້າຂອງຮ້ານຄ້ານ້ອຍຊາວພະມ້າ ກັບເຖົ້າແກ່ອອກເງິນຢືມ ໄດ້ມີບົດບາດສຳຄັນຢູ່ທົ່ວທຸກແຫ່ງໃນບໍລິເວນສາມລ່ຽມປາກນ້ຳ. ຍິ່ງໄປກວ່ານີ້ ຊາວພະມ້າຍັງເປັນນາຍໜ້າເກັບກວດຊື້ເຂົ້າບ່ອນລະສິບບຸ ຊາວບຸ ຢູ່ພຸ້ນແດ ຢູ່ພື້ແດ ເພື່ອຕົ້າໂຮມກັນໃຫ້ໄດ້ເປັນຈຳນວນພັນຈຳນວນຫມື່ນໂຕນ ແລ້ວໄຫລລົງໄປຫາໂຮງສີຕາມທາເຮືອ. ແນ່ນອນວ່າ ພວກນາຍໜ້າຊື້ເຂົ້າຊາວພະມ້າຍັງອອກໄປຫາຊື້ເຂົ້າໂດຍກົງນຳຊາວນາເອງ ແຕ່ພວກເຂົາກໍມີບົດບາດສຳຄັນອີກສ່ວນນຶ່ງຢູ່ໃນການເປັນນາຍໜ້າຊື້ເຂົ້າ ຈຳນວນມະຫາສານທີ່ວົນວຽນຢູ່ໃນເສັ້ນສາຍຂອງລະບົບ. ເລື່ອງນີ້ ບໍ່ຈະແຈ້ງປານໃດວ່າ ເປັນຍ້ອນຫຍັງ. ອາດເປັນຍ້ອນຄວາມລັ່ງເລໃຈ ຂອງພວກເຈຕຕະຢາຣ໌ໃນການຈັດການກັບບັນຫາເລື່ອງເຂົ້າ ປະສົມໃສ່ກັບຄວາມຂາດເຂີນຂອງຊາວຈີນເອງແດ ຈຶ່ງເຮັດໃຫ້ຊາວພະມ້າເຂົ້າມາສຸບຕ່ໍ ເຂົ້າຕ່ອງໂສ້ການຄ້ານັ້ນ ອາດເປັນຍ້ອນວ່າຄ່ານິຍົມຂອງຊາວນາພະມ້າ ຍອມກ້າສ່ຽງໄພ ແລະມັກເປັນເຈົ້າຂອງກິດຈະການຫລາຍ ກວ່າການຖືວ່າມັນແມ່ນ"ສິ່ງທຳມະດາ"ສຳລັບຊາວນາໃນອາຊີຕາເວັນອອກສຽງໃຕ້. ແນ່ນອນວ່າໃນລະຍະ ນັ້ນໄດ້ມີການບຸກຮຸກເຂດດິນບໍລິເວນສາມລ່ຽມປາກນ້ຳ ແລະຊາວພະມ້າ ກໍເຂົ້າໄປມີສ່ວນຢູ່ໃນທຸກຂະບວນ ການຄາດຜົນປະໂຫຍດ ທຸກຢ່າງທຸກແນວດ້ວຍ.

ໃນຂັ້ນຕອນທີສອງ ນັບແຕ່ປີ 1900 ມາຮອດຍາມລົງຄ້ອຍຕົກຕ່ຳທາງເສດຖະກິດ ຄັ້ງຍິ່ງໃຫຍ່ ອຸດສາຫະກຳຄ້າເຂົ້າ ຈາກເຂດສາມລ່ຽມປາກນ້ຳ ພະມ້າ ບັນລຸສະພາວະສຸກງອມຂອງມັນ ໃນເວລາດຽວກັນ ກໍເກີດການປ່ຽນແປງດ້ານການຕະຫລາດ ຢູ່ໃນການຈັດຕັ້ງພາຍໃນຂອງມັນ. ພື້ນທີ່ປູກເຂົ້າ ເພີ່ມຈາກ 7 ລ້ານເອເຄີຣ໌ ໃນປີ 1904 ເປັນ 10 ລ້ານ ໃນປີ 1930; ການສົ່ງອອກ ເພີ່ມຈາກ 2 ລ້ານເປັນ 3 ລ້ານໂຕນ, ລາຍຮັບຈາກຂາອອກສົມທົບໃສ່ການຂຶ້ນລາຄາເຂົ້າທະວີເປັນສອງເທົ່າ ລະຫວ່າງປີ 1906 ຫາປີ 1926 , ແຮງງານອິນເດຽອົບພະຍົບ ເຂົ້າແລະອອກຈາກພະມ້າ ເພີ່ມຈາກ 284,000 ຄົນ ໃນປີ 1900 ເປັນ 777,000 ຄົນໃນປີ 1929.

ການປ່ຽນແປງພາຍໃນທີ່ຕິດຕາມຄວາມເປັ່ງບານຕ່ໍມາ ຖືກເບິ່ງຂ້າມ ໂດຍສະເພາະແລ້ວ ແມ່ນຕົວເລກເອກະລັກຂອງຍຸກຜ່ານມາ ນັ້ນຄື ຈຳນວນຊາວນາຜູ້ບຸກເບີກ. ໂດຍຄວາມຕັ້ງໃຈເສຽສະຫລະໃສ່ວັນເວລາແຫ່ງການໄຂຊາຍແດນການຄ້າ ອອກສູ່ຮູບແບບການຜະລິດກະສິກຳ ເພື່ອການຄ້າຢ່າງຄົບຖ້ວນກວ່າຫມູ່ຫມົດ ໃນກຸ່ມຊາວນາຜູ້ຜະຫລິດພືດສົ່ງອອກໃນພາກພື້ນອາຊີຕາເວັນອອກສຽງໃຕ້, ບັດນີ້ຊາວກະສິກອນນ້ອຍພະມ້າ ພວມຜະເຊີນໜ້າໂດຍກົງຢ່າງຫລີກບ່ໄດ້ກັບພິດໄພຂອງ ລະບົບເສດຖະກິດນີ້. ຄວາມບໍ່ແນ່ນອນຂອງລາຄາເຂົ້າໃນຕະຫລາດໂລກ, ການຕາຍລະບາດຂອງສັດລາກແກ່ລາຄາແພງຫລືການໃຊ້ຈ່າຍເກີນເຖືອດຊື່ໆ ກໍອາດສາມາດ ເຮັດໃຫ້ພາລະແບກຫາບເງິນກູ້ຢືມອັນມື່ນມໍ່ຕ່ໍຄວາມດຸ່ນດຽງປັ້ນປ່ຽນມາເປັນຫນີ້ສິນໃຊ້ບໍ່ຫມົດໄດ້ໃນທັນທີ. ເຫດການທຳນອງນີ້ເກີດຂຶ້ນແລ້ວໃນຍຸກບຸກເບີກຊຸ່ນດຽວກັນ

ແຕ່ສະໄໝນັ້ນຍັງມີທີ່ດິນຫວ່າງເປົ່າເຕັມໄປໝົດ ແລະຊາວນາ ກໍສາມາດຫຍັບຍ້າຍເລິກເຂົ້າໄປໃນເຂດ ສາມລ່ຽມ ແລະເລີ່ມຕົ້ນໃໝ່ໄດ້ອີກ. ບັດນີ້ປະຊາກອນເພີ່ມຂຶ້ນຫລາຍ ແລະແຜ່ນດິນກໍອັ່ງອໍດ້ວຍຜູ້ຄົນຊາວ ນາຜູ້ຫລົ້ມຈົມຈຶ່ງກາຍເປັນຜູ້ຕ້ອງເຊົ່າດິນ ຫລື ກາຍເປັນ ຜູ້ບໍ່ມີດິນປູກຝັງເລີຍ.

ການເຊົ່າດິນສຳລັບປູກຝັງເລີ່ມຂຶ້ນໃນລະຍະຕົ້ນສະຕະວັດທີ່ຊາວ ປະມານ 25% ຂອງດິນຢູ່ໃນເຂດ ປູກເຂົ້າຕົ້ນຕໍໃນເມືອງໃຫຍ່ໆ ສາມສິບແຫ່ງ ຢູ່ບໍລິເວນສາມລ່ຽມປາກນ້ຳພະມ້າ ຖືກໃຫ້ເຊົ່າແລະຈ່າຍເປັນ ເງິນສົດ ແຕ່ຄ່າເຊົ່າ ແລະເງື່ອນໄຂ ຍັງຖືວ່າດີຢູ່. ຢ່າງໃດກໍດີ ມາຮອດປີ 1928 ຕົວເລກ ສູງຂຶ້ນຮອດ 42 % ຄ່າເຊົ່າກໍສູງຂຶ້ນກວ່າເກົ່າຫລາຍ, ຜູ້ເຊົ່າມີໂອກາດທີ່ຈະຖືກຍຶດດິນຄືນ ແລະດິນເຊົ່າທີ່ຮຽກຄ່າເຊົ່ານັບມື້ ນັບສູງຂຶ້ນນັ້ນກໍຕົກເປັນຂອງຜູ້ທີ່ໃຫ້ລາຄາສູງກວ່າໝູ. ທີ່ດິນບາງຕອນທີ່ຊາວນານ້ອຍ ພະມ້າ ສູນເສຽໄປ ຕົກໄປຢູ່ໃນມືຂອງພວກ ເຈຕຕະຢາຣ໌ ແລະເຈົ້າຂອງຮ້ານຄ້າຊາວຈີນ ແຕ່ຕອນໃຫຍ່ແທ້ໆ ຕົກໄປຫາຊາວ ພະມ້າ. ຊົນຊັ້ນເຈົ້າທີ່ດິນ ໃນພະມ້າ ມີກົກເຄົ້າຄວາມເປັນມາແຕກຕ່າງກັນ ໃນນັ້ນມີທັງຜູ້ເປັນເຖົ້າແກ່ອອກ ເງິນຢືມ, ອະດີດຊາວນານ້ອຍ ພະນັກງານລັດຖະບານ ຈາກໃນເມືອງ ແລະເຈົ້າຂອງໂຮງສີເຂົ້າຊາວ ພະມ້າ ເປັນຮ້ອຍໆແຫ່ງໃນທ້ອງຖິ່ນທັງໝົດ ເຂົ້າມາຕັ້ງຖິ່ນຖານ ໃນເຂດສາມລ່ຽມປາກນ້ຳ ລຸນຫລັງ ປີ 1900. ພວກເຈົ້າທີ່ດິນສ່ວນໃຫຍ່ ບໍ່ວ່າຈະເປັນຄົນຕ່າງດ້າວ ຫລື ພະມ້າເອງ ບໍ່ຢູ່ໃນທ້ອງຖິ່ນ ພວກເຂົາ ດຳລົງຊີວິດຢູ່ໃນເມືອງ ຫລື ທີ່ຢ່າງກຸ້ງ.

ສ່ວນຫລວງຫລາຍແລ້ວ ໃນລະຫວ່າງຊຸມປີເຫລົ່ານີ້ ລັກສະນະສັງຄົມຂອງຊຸມຊົນສາມລ່ຽມໃນເຂດ ປາກນ້ຳຖືກກະທົບຢ່າງແຮງຈາກກະແສອົບພະຍົບເຂົ້າມາຂອງ ຊາວອິນເດຽ ທີ່ນັບມື້ນັບຫລາຍຂຶ້ນ. ມາ ຮອດທ້າຍສະຕະວັດທີສິບເກົ້າ ຊາວອິນເດຽ ຫັນມາສຸມໃສ່ການເຮັດວຽກໃນຕົວເມືອງເປັນສ່ວນໃຫຍ່. ໃນສະ ໄໝນັ້ນ ແຮງງານໄຮ້ທີ່ດິນສະເພາະຢູ່ໃນເຂດສາມລ່ຽມປາກນ້ຳພະມ້າ ແມ່ນຊາວອົບພະຍົບພະມ້າທີ່ລົງ ມາຕາມລະດູການ ຈາກພາກກາງ ລອງເຮືອລົງມາຕາມແມ່ນ້ຳເພື່ອຊອກເງິນເລັກໆນ້ອຍໆ ກ່ອນຈະກັບ ຄືນບ້ານເດີມ. ແຕ່ລຸນຫລັງປີ 1900 ມາ ຊາວພະມ້າ ລົງມາທາງໃຕ້ຫນ້ອຍລົງ. ຍ້ອນວ່າບ່ອນທຳມາຫາ ກິນ ສ່ວນນຶ່ງຂອງພວກເຂົາຖືກຊາວນາພະມ້າພາກໃຕ້ເຊິ່ງເປັນອະດີດເຈົ້າຂອງດິນ ຫລື ຜູ້ເຊົ່ານັ້ນເອງ ຍາດໄປ. ແຕ່ບັດນີ້ ກຳມະກອນໃນທົ່ງນາຖືກຈັດຕັ້ງໂດຍ ກຸ່ມເຮັດວຽກຊາວອິນເດຽ ນັບມື້ນັບຫລາຍຂຶ້ນ. ພາຍໃຕ້ ນາຍຄຸມທີ່ເອີ້ນກັນວ່າ ເມສໄຕຣ (Maistry) ທີ່ເດີນທາງເລາະລອງໄປມາລະຫວ່າງນາໃນເມືອງ ຕ່າງໆ ເຮັດວຽກຕາມສັນຍາຈ້າງແລ້ວກໍໄປຫນ້າເລື້ອຍໆ ເພື່ອວຽກງານນີ້. ເຊັ່ນດຽວກັນ ຊາວອິນເດຽ ກໍມີສ່ວນເຮັດໃຫ້ຜູ້ເຊົ່ານາ ມີຈຳນວນສູງຂຶ້ນເລີຍໆ ຕາມເມືອງຕ່າງໆ ທັງເຮັດໃຫ້ຄ່າເຊົ່ານາສູງຂຶ້ນ ເນື່ອງ ຈາກການຊ່ວງເສັງກັນໃນລະຫວ່າງພວກເຂົາເອງ.

ໃນຊຸມທົດສະວັດທຳອິດຂອງສະຕະວັດທີ່ຊາວ ທ່າອຽງການເຊົ່າດິນນານີ້ຍັງບໍ່ພຸ່ງຂຶ້ນເຖິງຂີດສູງ ສຸດຂອງມັນ ທີ່ດິນຫລາຍກວ່າເຄິ່ງນຶ່ງຍັງຄົງເປັນກຳມະສິດຂອງຊາວກະສິກອນນ້ອຍ. ພວກເຈົ້າທີ່ດິນ ພະມ້າ ໂດຍສະເພາະພວກທີ່ດຳລົງຊີວິດ ຢູ່ໃນທີ່ດິນຂອງພວກເຂົາເອງ ສາມາດມີສາຍສຳພັນອັນສະຫນິດ ແໜ້ນກັບຜູ້ເຊົ່າດິນພວກເຂົາ. ແຕ່ຄຸນຄ່າທາງສັງຄົມຂອງການຜະຫລິດເຂົ້າ ຄ່ອຍໆສູນເສຽໄປເທື່ອລະ ຫນ້ອຍ. ຄອບຄົວນຶ່ງໆ ທີ່ຍຶດຖືຮູບແບບການຜະຫລິດເພື່ອໃຫ້ພໍຢູ່ພໍກິນ ໄດ້ກາຍເປັນສະຖາບັນທີ່ມີຕົວຕົນ ເດັ່ນແຈ້ງ ໃນຖານະເປັນກ້ອນດິນຈີ່ກໍ່ພື້ນຖານຂອງຊຸມຊົນຂັ້ນບ້ານ. ມາຮອດທ້າຍສະຕະວັດທີສິບເກົ້າ ການ ເປັນເຈົ້າຂອງທີ່ດິນຂະຫນາດນ້ອຍເພື່ອທຳການຄ້າຂາຍເຂົ້າ ທີ່ຖືກແຊກແຊງໂດຍກຳລັງການຕະຫລາດ, ສິນເຊື່ອ ແລະແຮງງານຈາກພາຍນອກ ກໍຍັງຄົງຄວາມຫມາຍເຕັມປ່ຽມສຳລັບຫົວຫນ່ວຍສັງຄົມຢູ່. ແຕ່ ຢ່າງໃດກໍຕາມບັດນີ້ຂອບເຂດຂອງຫົວຫນ່ວຍສັງຄົມນັ້ນ ຜ່ອຍບາງລົງຫລາຍ ເພາະກຳລັງຄົນບໍ່ໄດ້ເປັນປັດ ໄຈຫລັກແຫ່ງການຜະຫລິດອີກແລ້ວ ແລະຖືກແຫຍ້ດັນ ໂດຍກຳລັງເສດຖະກິດ ຜ່ານການຂະຫຍາຍຕົວຂອງ ສັງຄົມສາມລ່ຽມທີ່ນັບມື້ນັບອ່ອນແຮງລົງ.

ກົນໄກສັງຄົມອັນແປກປະຫລາດ ແລະບໍ່ເຜີງປາດຖະໜາມີ ສືບຕໍ່ດຳເນີນໄປໂດຍການສົ່ງອອກ ຂະຫນາດມະຫຶມາ ແລະຜົນກຳໄລມະຫາສານ ຈົນເຖິງລະຍະເສດຖະກິດຕົກຕ່ຳ ແລ້ວໃນທັນໃດມັນກໍແຕກ

ສະຫລາຍ ແລະຍ້ອນບໍ່ມີໃຜຮູ້ວິທີແກ້ໄຂຢ່າງຖືກຕ້ອງ ກໍເລີຍຕ້ອງປ່ອຍໄປ ເລີຍຕາມເລີຍ ສ້າງຄວາມເສຽ ຫາຍໃຫ້ແກ່ຜູ້ກຽວຂ້ອງສ່ວນໃຫຍ່ຈົນເຖິງເວລາ ຍີ່ປຸ່ນ ບຸກເຂົ້າມາ ແລະໄດ້ລົບລ້າງມັນໄປ. ເບິ່ງຄືນຫລັງ ແລ້ວ ກໍເປັນທີ່ຈະແຈ້ງຢູ່ວ່າ ຕົກມາຮອດລະຫວ່າງ ປີ 1930 ລະບົບໄດ້ເດີນທາງມາຮອດຈຸດສຸກງອມຂອງ ມັນ. ໃນຂັ້ນເລີ່ມຕົ້ນ ມັນເປັນສິ່ງທີ່ເປັນໄປໄດ້ ຄື ດ້ວຍການມີປະຊາກອນບໍ່ອັ່ງແຫນ້ນ ແລະດິນຫວ່າງເປົ່າ ຫລາຍໃນເຂດສາມລ່ຽມ. ບັດນີ້ ຊາຍແດນນັ້ນໄດ້ຖືກອັດລົງເປັນສ່ວນໃຫຍ່ ພື້ນທີ່ປູກເຂົ້າໃນເຂດສາມລ່ຽມ ພະມ້າ ຫລຸດຫນ້ອຍລົງເລື້ອຍໆ ແລະເຫລືອພຽງສິບລ້ານເອເຄີຣ໌ ໃນລະຫວ່າງປີ 1931 ຫາ ປີ 1941 ຂະນະ ທີ່ປະຊາກອນ ສືບຕໍ່ຫລາຍຂຶ້ນ. ຄວາມກົດດັນຕໍ່ພື້ນທີ່ບວກກັບ ລັກສະນະອັນພິເສດຂອງການຄ້າອຸດສາຫະ ກໍາ ໄດ້ທໍາລາຍຮູບແບບສັງຄົມທີ່ກໍ່ຕົວມາຫລາຍທົດສະວັດນັ້ນແລ້ວ. ຄວາມກົດດັນທີ່ສະແດງຕົວອອກເອງ ໃນພະມ້າ ດ້ວຍລາຄາເຂົ້າທີ່ຕົກຕໍ່າຢ່າງຕໍ່ເນື່ອງ ແລະລາຍໄດ້ຕົກຕໍ່າຢ່າງກະທັນຫັນຈາກການ ສົ່ງອອກ ເຂົ້າ, ສະຫລາຍພູປິຣາມິດ (ຮູບຈວຍຕັ້ງ) ຂອງສິນເຊື່ອ ເຊິ່ງເປັນບ່ອນອີງພື້ນຖານທັງຫມົດຂອງລະບົບ. ຄວາມຕົກຕໍ່າທາງເສດຖະກິດ ເລັ່ງລັດ ວິກິດການ ແລ້ວກໍລົ້ມລະລາຍລົງ.

ອາການຂອງຄວາມຫລົ້ມຈົມທາງສັງຄົມມີຫລາຍແບບ. ການກໍ່ຕັ້ງກຸ່ມກໍາມະກອນ ກັບການໃຫ້ຜູ້ ປະມູນເຊົ່າດິນລາຄາສູງທີ່ສຸດ ນັບມື້ນັບຫລາຍຂຶ້ນຈົນເບິ່ງເປັນທໍາມະດາ ຈໍານວນພື້ນທີ່ຈັບຈອງ ໂດຍເຈົ້າ ທີ່ດິນ ຢູ່ໃນສິບສາມເມືອງໃຫຍ່ ເຂດຜະຫລິດເຂົ້າຂອງພະມ້າ ພຸ່ງຂຶ້ນຢ່າງແຮງ ຈາກ 48% ໃນປີ 1928 ມາເປັນ 58% ໃນປີ1953, ແລະພວກເຈົ້າຂອງທີ່ລາຍນ້ອຍ ທີ່ຍັງອາໄສຢູ່ໃນຜືນດິນຂອງຕົນເອງ ໃນເວລາ ນັ້ນ ກໍຫນ້ອຍລົງ ທັງເປັນຜູ້ມີຫນີ້ສິນນໍາອີກ. ສັນຍານທີ່ຈະແຈ້ງອີກອັນນຶ່ງຂອງ ວິກິດການ ກໍແມ່ນການ ເພີ່ມຖອນກໍາມະສິດໃນທີ່ດິນຢ່າງໄວວາ ແລະຫລາຍຂຶ້ນ ໂດຍພວກ ເຈຕຕະຢາຣ໌. ໃນລະຍະ ທ້າຍ ປີ 1930 ພວກເຂົາ ເປັນເຈົ້າຂອງທີ່ດິນພຽງແຕ່ 500,000 ເອເຄີຣ໌ ເທົ່ານັ້ນ (6 %) ຢູ່ໃນສິບສາມເມືອງ, ມາຮອດປີ 1935 ພວກເຂົາມີຕື່ມຂຶ້ນອີກ 1,5 ລ້ານເອເຄີຣ ຖືວ່າ ເປັນເຈົ້າກໍາມະສິດ 27% ຂອງທີ່ດິນ ຢູ່ຫັ້ນ. ພວກ ເຈຕຕະຢາຣ໌ ຕ້ອງການທີ່ດິນດ້ວມເລັກດ້ວມນ້ອຍ ຄືກັບທີ່ພວກນາຍທະນາຄານຮັບຈໍານໍາຕ້ອງ ການເຮືອນ, ມີແຕ່ ເມື່ອໃດພວກລູກຫນີ້ເກີດຫລົ້ມຈົມ ແກ້ໄຂຫນີ້ສິນບໍ່ໄດ້ແລ້ວ ມັນຈໍາໃຫ້ພວກເຂົາຕ້ອງ ຍຶດເອົາທີ່ດິນມາ ສະສົມໄວ້ ແລະຕໍ່ມາຕະຫລອດທົດສະວັດ ພວກເຂົາກໍໄດ້ແຕ່ພະຍາຍາມ (ໂດຍມີຜົນປະໂຫຍດແດ່) ດິ້ນລົນ ເອົາຕົນເອງໃຫ້ຫລຸດພົ້ນອອກຈາກດິນລົ່ມຕົມຫນາ ຂອງພະມ້າ.

ລັກສະນະອັນຕໍ່ມາ ຂອງຄວາມຫລົ້ມຈົມທາງສັງຄົມ ກໍແມ່ນການຈະລາຈົນຕໍ່ຕ້ານຊາວອິນເດຽ ແລະຊາວຈີນ ທາງພາກໃຕ້ຂອງພະມ້າ ໃນລະຫວ່າງ ປີ 1930-1932 ເຊິ່ງໃນລະຍະຫລັງນີ້ ໄດ້ມີກະບົດ ເຣຽຊາຢັນ ເຂົ້າຮ່ວມຢູ່ນໍາ ແລະຂະບວນການຕໍ່ຕ້ານອິນເດຽ ໃນປີ 1938 ໃນຂັ້ນຕໍ່ມາ. ສ່ວນນຶ່ງ ແມ່ນ ຫມາກຜົນຂອງການຈະລາຈົນນີ້ ແລະອີກສ່ວນນຶ່ງ ຍ້ອນວ່າ ທຸລະກິດການຄ້າເຂົ້າ ໄດ້ຢຸດສະງັກໄປ, ປະລິ ມານຄົນອິນເດຽ ເຂົ້າ - ອອກພະມ້າ ຕົກຕໍ່າຢ່າງໄວວາ ຈາກ 777,000 ຄົນ ໃນປີ 1929 ຕົກລົງເປັນ 483,000 ຄົນໂດຍສະເລ່ຍຕໍ່ປີ ໃນລະຫວ່າງຊຸມປີ 1933 ຫາ 1938. ພາຍຫລັງປີ 1931 ສ່ວນໃຫຍ່ຈໍານວນ ຄົນອິນເດຽ ເຂົ້າພະມ້າໃນແຕ່ລະປີ ກໍຈຶ້ງຢູ່ໃນຈໍານວນເດີມ ຈັ່ງຊັ້ນ ຄົນອິນເດຽເຊິ່ງເປັນຊົນສ່ວນຫນ້ອຍ ໃນ ພະມ້າ ເຄີຍທະວີຂຶ້ນສອງເທົ່າເປັນນຶ່ງລ້ານຄົນ (7%) ລະຫວ່າງປີ 1901 ປີ 1931 ກໍຢຸດຢູ່ໃນລະດັບນີ້.

ຂັ້ນຕອນທີສາມ ສ້ຽງສຸດລົງ ດ້ວຍຄວາມພະຍາຍາມຂອງລັດຖະບານທ້ອງຖິ່ນພະມ້າ ເພື່ອແກ້ ບັນຫາໃນເຂດສາມລ່ຽມປາກນ້ໍາ, ແຕ່ສົງຄາມ ໄດ້ສໍາແດງໃຫ້ເຫັນວ່າ ມັນມີປະສິດທິຜົນກວ່າ. ການບຸກ ຮຸກຂອງຍີ່ປຸ່ນເຮັດໃຫ້ຊາວອິນເດຽ ຫລາຍແສນຄົນ ຕ້ອງອົບພະຍົບຄືນເມືອປະເທດອິນເດຽ ແລະ ການຍຶດ ຄອງ ປະເທດພະມ້າຂອງ ຍີ່ປຸ່ນ ກໍພຽງແຕ່ເຮັດໃຫ້ການສົ່ງອອກເຂົ້າຢຸດຕິລົງເທົ່ານັ້ນ. ພາຍຫລັງສົງຄາມ ຈຶ່ງແມ່ນລັດຖະບານຊາດນິຍົມທີ່ເປັນເອກະລາດ ເຂົ້າມາຈັດການຈັດລະບຽບໃຫມ່ ໃຫ້ແກ່ເສດຖະກິດຢູ່ ພະມ້າ.

ອັນສໍາຄັນອີກສອງ**ບ**່ອນທີ່ສົ່ງເຂົ້າອອກ ໃນພາກພື້ນອາຊີຕາເວັນອອກສຽງໃຕ້ ແມ່ນເຂດສາມ ລ່ຽມປາກນ້ໍາເຈົ້າພະຍາ ແລະປາກແມ່ນ້ໍາຂອງ, ແຕ່ລະບ່ອນຜະຫລິດໄດ້ປະມານເຄິ່ງນຶ່ງຂອງປະລິມານ

ເຂົ້າທີ່ສົ່ງອອກຈາກພະມ້າ. ທັງສອງບ່ອນນີ້ກໍມີຮູບແບບຄ້າຍຄືກັນກັບຢູ່ ພະມ້າ ແຕ່ແຕກຕ່າງແດ່ ແມ່ນຢູ່ ສະຫຍາມ ຄືດຳເນີນໄປໄດ້ດີກວ່າ.

ໃນລະຫວ່າງກາງສະຕະວັດທີສິບເກົ້າ ເຂດບໍລິເວນສາມລ່ຽມປາກນ້ຳຂອງ ມີປະຊາກອນຫນ້ອຍ ກວ່າ ເຂດສາມລ່ຽມປາກນ້ຳອີຣະວະດີຫລາຍ. ຕະຫລອດເວລາອັນຍາວນານເປັນພັນປີ ທີ່ຊາວຫວຽດນາມ ອົບພະຍົບ ລົງສູ່ພາກໃຕ້ (ນາມຖຸນ), ຊາວຫວຽດນາມ ເປັນຜູ້ທຳອິດ ທີ່ມາໄຂສັງກາດແຫ່ງບໍລິເວນສາມ ລ່ຽມນີ້ ໃນສະຕະວັດທີສິບເຈັດ ແຕ່ຕໍ່ມາອີກກວ່າສອງສະຕະວັດເຄິ່ງ ການຕັ້ງຖິ່ນຖານຂອງພວກເຂົາ ກໍຍັງ ຍອມເຍົາເບົາບາງຢູ່ ແລະໄປອັ່ງແຫນ້ນກັບແດ່ ກໍແຕ່ທາງພາກຕາເວັນອອກຂອງ ໄຊ່ງອນ ເທົ່ານັ້ນ ແລະ ກໍແມ່ນເຂດນີ້ເອງ ທີ່ພວກຝຣັ່ງ ມາຍຶດຄອງໄດ້ເປັນບ່ອນ ທຳອິດ ໃນ ປີ 1858-1867. ສິ່ງທີ່ພວກຝຣັ່ງ ເຮັດ ກ່ອນຫມູ່ຫມົດ ກໍແມ່ນການສົ່ງອອກເຂົ້າທີ່ເຫລືອດ້ານເລັກນ້ອຍ ຈາກເຫວ້ ໄປຍັງຕະຫລາດຕ່າງປະເທດ. ຕໍ່ມາອີກປະມານ ສອງຫາສາມທົດສະວັດ ພວກເຂົາກໍຂະຫຍາຍຊາຍແດນການຜະຫລິດ ເຂົ້າຂອງຊາວນາ ໂດຍຫຍັບຍ້າຍຈາກບ່ອນເກົ່າ ເລິກລົງມາທາງໃຕ້ ສູ່ບໍລິເວນສາມລ່ຽມ, ນັບເປັນຂະບວນໂຍກຍ້າຍ ທີ່ ຄ້າຍຄື ກັບຢູ່ພາກໃຕ້ພະມ້າ ແຕ່ຫາກຊັກຊ້າ ແລະໃນລະດັບນ້ອຍກວ່າ. ຢ່າງໃດກໍດີ ມາຮອດປະມານປາຍ ສະຕະວັດ ທີ່ສິບເກົ້າ ໂຄງການຮ່ອງເຫມືອງລະບາຍນ້ຳຂະຫນາດໃຫຍ່ກໍໄດ້ຕັ້ງຕົ້ນຂຶ້ນ ໂດຍລັດຖະບານ ອານານິຄົມ ອັນໄດ້ເຮັດໃຫ້ອຸດສາຫະກຳຄ້າເຂົ້າຂະຫຍາຍຕົວໄວກວ່າເກົ່າຫລາຍ, ມາຮອດລະຫວ່າງກາງ ຊຸມ ປີ 1930 ປະຊາຊົນ ໂກແຊຊິນ ໄດ້ທະວີຂຶ້ນເປັນສາມເທົ່າ (ເປັນ 4.5 ລ້ານ) ພື້ນທີ່ປູກເຂົ້າ ເພີ່ມຂຶ້ນ ສີ່ເທົ່າ (ເປັນ 5.5 ລ້ານ ເອເຄີ້ຣ) ແລະການສົ່ງອອກເຂົ້າ ສູງຂຶ້ນ ຫ້າເທົ່າ (1.2 ລ້ານ ໂຕນ)

ໂຄງສ້າງທາງດ້ານສັງຄົມ ແລະເຊື້ອຊາດ ຂອງອຸດສາຫະກຳການຄ້າເຂົ້າຢູ່ ໂກແຊງຊິນ ມີລັກ ສະນະງ່າຍດາຍກວ່າຢູ່ ພະມ້າຫລາຍ ອັນຕົ້ນຕໍແມ່ນຍ້ອນວ່າ ຊາວຈີນ ໄດ້ຄອບຄອງຕະຫລາດ ແລະຂັ້ນ ຕອນດຳເນີນການໂດຍບໍ່ມີຊາວຕ່າງດ້າວອື່ນ ແລະຄົນຫວຽດນາມ ເລີຍ. ຄົນຊາດຝຣັ່ງ ທີ່ເປັນເຈົ້າຂອງ ໂຮງສີເຂົ້າຈຳນວນຫນ້ອຍຫນຶ່ງ ຢູ່ໄຊ່ງອນ ເປັນຜູ້ຈັດສົ່ງອອກເອງ ແຕ່ທຸລະກິດການຄ້າເຂົ້າກໍ ຍັງຕົກຢູ່ໃນມື ຄົນຈີນ ເປັນສ່ວນໃຫຍ່ ນັບແຕ່ເຈົ້າຂອງໂຮງສີຂະຫນາດໃຫຍ່ ແລະຜູ້ສົ່ງອອກລາຍໃຫຍ່ຢູ່ ໄຊ່ງອນ, ຜູ້ຈັດຊື້ ຈຳນວນຫລວງຫລາຍ ຢູ່ ໄຊ່ງອນ ແລະຕົວແທນຂອງເຂົາຢູ່ຕາມຕະຫລາດໃນຫົວເມືອງຕ່າງໆ ລົງມາຈົນ ຮອດເຈົ້າຂອງຮ້ານຄ້າເປັນພັນໆ ແລະພໍ່ຄ້ານ້ອຍທາງເຮືອທີ່ຂາຍສິນຄ້າເປັນຫນີ້ ໃຫ້ຜູ້ຜະລິດ ຊາວຫວຽດ ນາມ ແລະເກັບຄືນຜົນລະປູກຂອງພວກເຂົາ. ເຊັ່ນດຽວກັນກັບເພື່ອນຮ່ວມອາຊີບ ຂອງພວກເຂົາ ໃນ ສະຫຍາມ ຊາວຈີນ ໃນໂກແຊງຊິນເກັບຊື້ເຂົ້າປູກຊາວນາລູກຫນີ້ ແຕ່ບໍ່ແມ່ນໃຫ້ເຊົ່າດິນ ເຮັດນາ ຕ່າງກັບ ຊາວຈີນ ແລະພວກເຈຕຕິຢາຣ໌ ໃນພາກໃຕ້ພະມ້າ.

ຮູບແບບການໃຫ້ຢືມເງິນສົດ ແລະມີຊາວນາໄຮ້ທີ່ດິນປູກຝັງ ຄ້າຍຄືກັບສະພາບການຢູ່ພະມ້າ ເມື່ອຊຸມປີ 1930 ແຕ່ຂັ້ນຕອນການຂະຫຍາຍຕົວຂອງມັນ ແຕກຕ່າງກັນສົມຄວນ. ຢູ່ໃນກ້ຳຕາເວັນອອກ ຂອງເຂດສາມລ່ຽມປາກນ້ຳ ໃກ້ໆໄຊ່ງອນ ສັງຄົມຊາວນາທີ່ເກົ່າແກ່ຍາວນານ ລອຍໄປຕາມອິດທິພົນຂອງ ການຜະຫລິດເພື່ອສົ່ງອອກ ມາເປັນຮູບແບບເຈົ້າຂອງທີ່ດິນຂະຫນາດກາງ ສ່ວນຫລາຍ ມີພື້ນຖານມາຈາກ ການກູ້ຢືມເງິນສົດພາຍໃນທ້ອງຖິ່ນ ເຊິ່ງອາດຈະບໍ່ທັນເປັນທີ່ຮູ້ຈັກດີພໍເທົ່າໃດໃນຫວຽດນາມ. ໄກອອກໄປ ທາງຕາເວັນອອກ ໂດຍສະເພາະໃນເຂດເລີຍປາສັກອອກໄປບໍລິເວນສາຂາແມ່ນ້ຳຂອງ ເບື້ອງຕາເວັນຕົກສຸດ ໃນເຂດສາມລ່ຽມພຸ້ນ ມີທີ່ດິນຂະຫນາດກວ້າງໃຫຍ່ກວ່າເປັນຈຳນວນຫລາຍ ນັບມາແຕ່ຕອນເລີ່ມຕົ້ນ ເພາະ ລັດຖະບານອານານິຄົມ ຂາຍດິນຕອນໃຫຍ່ໆຈຳນວນຫລາຍອອກ ພາຍຫລັງເຮັດຮ່ອງ ເຫມືອງລະບາຍນ້ຳ ຢູ່ທີ່ນັ້ນສຳເລັດລົງ. ທີ່ດິນເຫລົ່ານີ້ ລາຄາຖືກ ຕົກເປັນຂອງຄົນຫວຽດນາມໃນໄຊ່ງອນ ທີ່ມີສາຍພົວພັນໃກ້ຊິດ ກັບລະບອບປົກຄອງ ຝຣັ່ງ ແລະກັບກະໂຕ ຄົນຝຣັ່ງເອງນຳ ໄດ້ຮັບການຂະຫນານນາມວ່າພື້ນ ທີ່ປູກຝັງ ແຕ່ມັນຖືກຈັດການແບບຄ້າຍຄືກັບສິ່ງທີ່ເອີ້ນວ່າ ເຮຊຽນດາສ (haciendas) ຢູ່ ຟິລິບປິນ ຄື ທີ່ດິນຖືກຕັດ ແບ່ງອອກເປັນຕ່ອນເລັກຕ່ອນນ້ອຍໃຫ້ຄົນເຊົ່າ. ດັ່ງນັ້ນ ເຂົ້າຈຶ່ງຖືກປູກໃສ່ທີ່ດິນຕອນນ້ອຍໆ ຂອງຊາວນາ ໂດຍມີການຊົມໃຊ້ແຮງງານພວກຊາວນາຜູ້ໄຮ້ດິນ ທີ່ຢູ່ໃກ້ຄຽງ ຫລື ທີ່ມາຈາກພາກຕາເວັນອອກຂອງເຂດ

ສາມລ່ຽມ ຫລື ພາກເໜືອຫວຽດນາມ. ເນື່ອງຈາກວ່າ ເສັ້ນທາງຄ້າຂາຍເຂົ້າຕົກໄປຢູ່ໃນກຳມືຂອງ ຊາວ ຈີນ ກຳໄລສຳລັບເຈົ້າຂອງດິນທີ່ແທ້ຈິງຈຶ່ງມາຈາກຄ່າເຊົ່າ ແລະການອອກເງິນຢືມແກ່ຜູ້ເຊົ່າ. ດັ່ງດຽວກັນ ກັບຢູ່ພາກໃຕ້ຂອງພະມ້າ ຊາວນາໄດ້ຍົກຍ້າຍອອກໄປສູ່ບ່ອນດິນຫວ່າງເປົ່າ ເພື່ອບຸກເບີກ ແລະທຳການ ປູກຝັ່ງ ແຕ່ຢູ່ໃນເຂດສາມລ່ຽມແມ່ນ້ຳຂອງ ພວກເຂົາເລີ່ມດ້ວຍການ ເປັນຜູ້ເຊົ່າດິນລັດ ແລະເປັນຜູ້ຂາດດິນ ເຊິ່ງຢູ່ໃນເຂດສາມລ່ຽມປາກນ້ຳ ອີຣະວະດີ ໃຊ້ເວລາຢູ່ເປັນເຄື່ອງສະຕະວັດເພື່ອປ່ຽນແປງ. ຢ່າງໃດກໍຕາມ ໃນລະຍະຍາວ ຊາວນາຫວຽດນາມ ກໍບໍ່ພໍໃຈຮັບເອົາສະພາບເງື່ອນໄຂຢ່າງນີ້ ຄືກັບຊາວພະມ້າ. ຄວາມ ໂກດແຄ້ນ ກາຍເປັນບັນຫາການເມືອງ ທີ່ນັບມື້ນັບທະວີຂຶ້ນຂອງພວກເຂົາ ປາກົດຟົດຮ້ອນຂຶ້ນສຸດຂີດ ພາຍ ຫລັງປີ 1945.

ກົງກັນຂ້າມ ທຸລະກິດການຄ້າເຂົ້າຂອງສະຫຍາມ ມີປະຫວັດການ ທຸ່ນທ່ຽງ ສະຫມີຕົ້ນ ສະເໝີ ປາຍດີ ມາຈົນຮອດປີ 1940. ເຫດຜົນນຶ່ງ ກໍແມ່ນສະຫຍາມຖືກເປີດອອກສູ່ການຄ້າຂອງໂລກ ບໍ່ແມ່ນດ້ວຍ ການຍຶດຄອງ ຄື ພະມ້າ ຫລື ໂກແຊງຊີນ ແຕ່ຫາກຕ້ອງຮັກສາຂໍ້ຕົກລົງຕາມສົນທິສັນຍາປີ 1855 ເຊິ່ງ ວາງພື້ນຖານໄວ້ໂດຍ ຜູ້ກຳອຳນາດຫົວທັນສະໄໝ ທີ່ຮຽນຈາກສະຖາບັນ ມຸງກຸດ-ບຸນນາກ (Mongkut-Bunnang School) ທີ່ໄດ້ຮັບການສະໜັບສະໜຸນຈາກທີ່ເປີກສາ ປະຈຳສຳນັກລາຊະວັງ ຫົວນິຍົມອັງກິດ. ລະບອບການປົກຄອງກ້າວເດີນໄປຢ່າງໜັກແໜ້ນ ແຕ່ຫາກຊັກຊ້າໃນການລຶບລ້າງລະບົບແຮງງານເກນ ແລະລະບອບຍ້ອຍຍ້າ (ທັງສອງລະບົບນີ້ເກືອດຫ້າມການເຄື່ອນຍ້າຍຢ່າງເສລີຂອງຊາວນາ ໃນສະຫຍາມ ດ້ວຍເຫດນີ້ຈຶ່ງຖ່ວງດຶງຄວາມເຕີບໃຫຍ່ດ້ານອຸດສາຫະກຳເຂົ້າໄປນຳ) ແລະດ້ວຍເຫດຜົນທາງດ້ານອາກອນ ພາສີການເງິນໄດ້ປະຕິເສດການລົງທຶນຫລາຍຂຶ້ນ ຄືລົງພຽງແຕ່ໜ້ອຍນຶ່ງໃສ່ຊົນລະປະທານ ແລະການລະ ບາຍນ້ຳ (ແລະອັນນີ້ອີກກໍຖ່ວງດຶງຄວາມກ້າວໜ້າ ແລະມີທ່າວ່າຈະຮັກສາດິນປູກເຂົ້າໄວ້ໃນມືຂອງ ຊາວ ນາ). ໂດຍທົ່ວໄປແລ້ວປາກົດວ່າ ເງິນທຶນຈາກພາຍນອກ ທັງຈາກພາກລັດຖະບານກັບເຖົ້າແກ່ອອກເງິນ ຢືມຕ່າງດ້າວ ທີ່ຕົກໄປສູ່ການປູກເຂົ້າຢູ່ໄທນັ້ນ ມີໜ້ອຍກວ່າຢູ່ພາກໃຕ້ ພະມ້າ ແລະໂກແຊງຊີນ. ດ້ວຍ ເຫດຜົນເຫລົ່ານີ້ ແລະເຫດຜົນອື່ນໆ ອຸດສາຫະກຳການຜະຫລິດເຂົ້າຢູ່ເຂດສາມລ່ຽມນ້ຳເຈົ້າພະຍາ ເຊ ເບິ່ງຄືວ່າ ການສົ່ງອອກທັງໝົດ ທີ່ດຳເນີນມາຈົນຮອດ ຊຸມປີ 1920 ເຕີບໃຫຍ່ຊ້າກວ່າຢູ່ພະມ້າ ຫລາຍ ແລະຍັງບໍ່ໃກ້ວ່າຈະເປັນການຄ້າຄືຢູ່ໃນພາກໃຕ້ພະມ້າ ແລະໂກແຊງຊີນ. ເມື່ອຊາວນາໄທ ຍົກຍ້າຍເຂົ້າໄປ ບຸກເບີກດິນຢູ່ເຂດສາມລ່ຽມ ພວກເຂົາບຸກເບີກເນື້ອທີ່ໜ້ອຍກວ່າເກົ່າ ສຳລັບປູກຝັ່ງ ທັງຊົມໃຊ້ແຮງງານ ໃນລະດູການໜ້ອຍລົງ ແລະຍິ່ງກວ່າສິ່ງໃດໝົດ ພວກເຂົາໃຊ້ຈ່າຍເງິນໂດຍສ່ວນໃຫຍ່ ໃນໝູ່ພວກຂອງຕົນ ເອງເພື່ອຂະຫຍາຍເນື້ອທີ່ໃຫ້ກວ້າງຂວາງກວ່າ. ການບຸກເບີກດິນປູກເຂົ້າ ແມ່ນຂະບວນການອັນ ຍິ່ງ ໃຫຍ່ ເຊັ່ນດຽວກັນກັບຢູ່ໃນບໍລິເວນສາມລ່ຽມປາກນ້ຳ ຢູ່ພະມ້າ ແລະໂກແຊງຊີນ ແຕ່ມັນ ເປັນຂະບວນການຂອງ ຊາວນາຫລາຍກວ່າ. ຜ່ານມາຍຸກນຶ່ງ ຊາວນາໃນສະຫຍາມ ດຳລົງຄົງຕົວຢູ່ແບບເປັນອິດສະລະ ຜະຫລິດ ກຸ້ມກິນ ປູກເຂົ້າຢ່າງຫລວງຫລາຍ ດ້ວຍວ່າເຂົ້າເປັນພືດທີ່ສ້າງລາຍຮັບເງິນສົດ ສຳລັບຜູ້ທີ່ຕ້ອງຈ່າຍ ພາສີເປັນເງິນ ແລະເພື່ອຊື້ສິນຄ້ານຳເຂົ້າເຊັ່ນ ຜ້າແພ ໂຄມໄຟນ້ຳມັນ ແລະ ນ້ຳມັນກາສ໌.

ເນື່ອງຈາກວ່າມີເຈົ້າທີ່ດິນໜ້ອຍລາຍ ແລະໃນນີ້ກໍມີໜ້ອຍຄອບຄົວທີ່ເປັນຄົນໄທ ທັງເຈົ້າຂອງ ໂຮງສີໃຫຍ່ໃນບາງກອກ ກໍແມ່ນຂອງຄົນເອີຣົບ ຈຶ່ງເປັນໂອກາດອັນງາມ ສຳລັບການຂຸ່ວງເສັງ ຂອງຄົນ ຈີນ ໃນລະຍະລຸນຫລັງຊຸມປີ 1890, ຄູ່ຄ້າຂາຍທີ່ແທ້ຈິງຂອງຊາວນາ ຢູ່ໃນອຸດສາຫະກຳຄ້າເຂົ້າ ຈຶ່ງແມ່ນ ຄົນຈີນ. ຢູ່ບາງກອກ ໂຮງສີເຂົ້າຂະໜາດໃຫຍ່ຂອງຄົນຈີນ ແລະແຮງງານຈີນທັງໝົດ ຄອບຄອງຄວາມ ເປັນເຈົ້າຢູ່ໃນທຸລະກິດການຄ້າເຂົ້າ. ຢູ່ໃນເຂດຊົນນະບົດ ພໍ່ຄ້າມືກາງຄົນຈີນເດີນທາງໄປທົ່ວ ພາຍເຮືອລຳ ນ້ອຍຂອງເຂົາເລາະລ່ອງໄປຕົກລົງລາຄາກັບລູກຄ້າຜູ້ລ້ຽງເຄີຍ, ນຳເອົາຂ່າວຄາວໄປບອກ ນຳສິນຄ້າໄປຈຳ ໜ່າຍໃຫ້ ໃຫ້ຕິດໜີ້ເອົາສິນຄ້າລ່ວງໜ້າ, ໃຫ້ຢືມເງິນສົດ ແລະຮັບຊື້ເຂົ້າເຫລືອໃນຍາມເກັບກ່ຽວ. ມາ ເຖິງລະຫວ່າງຊຸມປີ 1930 ຊົນຊັ້ນນຳ ໃນສະຫຍາມຢູ່ບາງກອກ ຈຶ່ງໄດ້ຫັນມານິຍົມເຮັດການຄ້າແບບ ຈີນຫລາຍຂຶ້ນ ແຕ່ຊາວນາເອງ ຍັງມັກພໍ່ຄ້າຄົນກາງຊາວຈີນຫລາຍກວ່າ ເພາະມີຄວາມຈຳເປັນ ທັງກໍ

ເຈລະຈາໄດ້ງ່າຍກວ່າ. ຊາວນາ ກຳພູຊາ ກໍເຮັດແບບດຽວກັນນີ້ກັບຜົນຜະຫລິດເຂົ້າທີ່ມີປະລິມານຫນ້ອຍກວ່າ ແຕ່ກໍມີອັນໃກ້ຄຽງ ກັບຂອງໄທຫລາຍ.

ຢາງພາຣາ ກັບເຂົ້າ ເປັນພືດສົ່ງອອກ ສຳຄັນທີ່ສຸດສຳລັບຊາວນາ ພໍ່ຄ້າມືກາງ ໃນພາກພື້ນອາຊີຕາເວັນອອກສຽງໃຕ້ ໃນຍຸກນັ້ນ ແລະມີບົດບາດຕັດສິນຢູ່ໃນ ປະຫວັດສາດສັງຄົມ ການເມືອງ ແລະເສດຖະກິດຂອງອົງເຂດໃຫຍ່ໆ ຫລາຍແຫ່ງ. ແຕ່ຊາວນາ ກັບພໍ່ຄ້າມືກາງ ຊາວຕ່າງຊາດ ໄດ້ນຳເອົາແນວພັນຕ່າງໆເຂົ້າມາສູ່ຕະຫລາດການຄ້າໂລກ ໃນນັ້ນນັບທັງຢາງພາຣາ ຈາກພະມ້າ ແລະສະຫຍາມ, ນວນຫມາກພ້າວແຫ້ງ ປໍ່ານ ຈາກ ຟິລິບປິນ ແລະນວນພ້າວແຫ້ງ ຈາກຫມູ່ເກາະດອນພາກຕາເວັນຕົກ ຂອງ ເນເທີແລນ ອິນດີສ. ແນ່ນອນວ່າ ທັງຊາວນາຜູ້ຜະຫລິດ ທັງພໍ່ຄ້າມືກາງ ບໍ່ໄດ້ສຸມໃສ່ແຕ່ເລື່ອງການສົ່ງອອກ ແລະການຕະຫລາດຢ່າງດຽວ. ເພາະວ່າຢູ່ໃນທ້ອງຖິ່ນເອງ ກໍມີການຄ້າຂາຍໃນປະລິມານທີ່ສຳຄັນຢູ່ແລ້ວ ໂດຍສະເພາະອາຫານ ເຄື່ອງກິນ ຄື ປາ ກັບ ເກືອ ແລະດ້ວຍການເພີ່ມຂຶ້ນຢ່າງໄວວາຂອງ ປະຊາກອນ ການປັບປຸງ ລະບົບຂົນສົ່ງ ແລະຄວາມຊຳນານໃນ ແຕ່ລະສາຂາວິຊາການ ໃນບາງອົງເຂດ ແລະເຫນືອສິ່ງໃດຫມົດ ການເຕີບໃຫຍ່ຂອງຕົວເມືອງໃຫຍ່ ແລະນ້ອຍ ໃນທົ່ວພາກພື້ນ ໄດ້ເຮັດໃຫ້ການຄ້າຂາຍພາຍໃນ ທະວີຂຶ້ນຢ່າງຫລວງຫລາຍ. ໃນຕົ້ນສະຕະວັດທີຊາວ ຢູ່ພາກກາງພະມ້າ ແຕ່ລະປີ ມີການສົ່ງສັດລາກແກ່ ຮອດ 100,000 ໂຕ ໄປຍັງເຂດ ຜະຫລິດເຂົ້າ ທາງພາກໃຕ້ຂອງປະເທດ ,ບ້ານຊາວປະມົງຈີນ ຢູ່ ປາການ ສິອາປີ-ອາປີ (Pagan Api-Api) ກ້ຳຕາເວັນອອກ ຂອງສຸມາຕຣາ ສົ່ງຂາຍປາສູ່ຕະຫລາດ ມະລາຢາ ແລະສຸມາຕຣາ ເຖິງປີລະ 80.000 ໂຕນ; ຊາວບາຫລີ ພຸດ-ອິດສລາມ ສົ່ງໂຕຫມູຍັດໃສ່ສຸ່ມຫວາຍ ໄປລ້ຽງຄົນຈີນ ກັບຄົນເອີຣົບ ສ່ວນໃຫຍ່ຢູ່ໃນເຂດອິສະລາມຂອງ ອິນໂດເນເຊຍ ແລະ ມະລາຢາ. ຍົກເວັ້ນການເຮັດ ສວນປູກຜັກຂອງຊາວຈີນຈຳນວນນຶ່ງທີ່ຢູ່ໃກ້ຕົວເມືອງໃຫຍ່ທັງຫລາຍ ແລະ ບ້ານຊາວປະມົງ ຢູ່ປາການ ແລ້ວ, ຜົນຜະຫລິດກະສິກຳ ກັບ ເຄື່ອງທະເລ, ກະຕ່າ, ຫມວກ ແລະເຄື່ອງໃຊ້ອື່ນໆ ລ້ວນແຕ່ແມ່ນຜົນຜະຫລິດຂອງຊາວນານ້ອຍທີ່ສ້າງລາຍຮັບໃຫ້ເລັກໆນ້ອຍໆ ຄຽງຄູ່ກັບການເຮັດນາເພື່ອໃຫ້ກຸ້ມກິນ. ຍົກເວັ້ນການຄ້າທາງໃກ້ ອາຫານເຄື່ອງແຫ້ງແລ້ວ ພວກຊາວນາ ຊາວສວນເຫລົ່ານີ້ ມັກດຳເນີນການໂດຍຕົນເອງ ສ່ວນວ່າກິດຈະກຳທີ່ໄປໄກກວ່າຂອງພໍ່ຄ້າຊາວສັນຕຣີ ຢູ່ໃນກິ່ວດອນນັ້ນ ການທຳມາຄ້າຂາຍຢູ່ພາຍໃນ ໄດ້ ສົມທົບເຂົ້າກັບຕາຫນ່າງການຄ້າຂອງຊາວຈີນ ເປັນສ່ວນຫລາຍ. ແມ່ນແຕ່ເຂົ້າ ເຊິ່ງເມື່ອຄວາມຕ້ອງການ ໃນຕົວເມືອງທະວີຂຶ້ນ ກໍເຮັດໃຫ້ເກີດໂຮງສີນ້ອຍ ໃນຊົນນະບົດ ເຕັມໄປຫມົດ ແລະຊາວນາ ກໍເກີດຄວາມນິຍົມບໍລິໂພກເຂົ້າເມັດຂາວຫລາຍຂຶ້ນ ແລະນີ້ກໍເປັນສາເຫດ ໃຫ້ພວກຊາວນາໃນຫລາຍອົງເຂດ ຢຸດເຊົາການປູກເຂົ້າມ້ຽນໄວ້ໃນຮີນເພື່ອກິນເອງຂອງເຂົາ ໄດ້ກາຍເປັນຜົນຜະຫລິດເພື່ອການຄ້າ ມີຫນ້າທີ່ເປັນໄມ້ງັດໃຫ້ແກ່ການຄ້າຂາຍທີ່ຄອບງຳ ຂອງຊາວຈີນ ຢູ່ໃນບາງເຂດທີ່ບໍ່ສົ່ງເຂົ້າອອກຂາຍໄປຕ່າງປະເທດ ເຊັ່ນ ພາກເຫນືອ ແລະພາງກາງຫວຽດນາມ ຊະວາ ແລະ ຟິລິບປິນ.

## ນາຍທຶນຕາເວັນຕົກ ກັບແຮງງານທ້ອງຖິ່ນ

ກຸ່ມອຸດສາຫະກຳສົ່ງອອກຈຸລຸສຸດທ້າຍ ປະກອບດ້ວຍບໍລິສັດນາຍທຶນຕາເວັນຕົກ ທີ່ນຳໃຊ້ແຮງງານຂອງທ້ອງຖິ່ນ ແທນຄົນຕ່າງດ້າວ ດ້ວຍມີເຫດຜົນໃດນຶ່ງ. ຄວາມແຕກຕ່າງລະຫວ່າງກຸ່ມນີ້ ກັບກຸ່ມອື່ນ ທີ່ກ່າວມາເບື້ອງເທິງນັ້ນ ຍັງບໍ່ສາມາດສລຸບໄດ້ ແລະອາດບໍ່ມີຄວາມໝາຍສຳຄັນຫຍັງ ຕໍ່ກັບການຈັດຕັ້ງທາງເສດຖະກິດ, ແຕ່ກໍພໍບອກເຖິງປະຫວັດສາດສັງຄົມຂອງອາຊີຕາເວັນອອກສຽງໃຕ້ ໄດ້ເປັນຢ່າງດີ. ຕົວຢ່າງນຶ່ງກໍແມ່ນ ອຸດສາຫະກຳໄມ້ສັກ ຢູ່ພະມ້າ ແລະພາກເໜືອຂອງສະຫຍາມ ທີ່ເປັນການສົ່ງອອກລາຍໃຫຍ່ທີສອງ ຫລືທີສາມ ຂອງປະເທດເຫລົ່ານັ້ນ ຢູ່ເປັນເວລາດົນໃນສະໄໝນັ້ນ. ໃນດ້ານການບໍລິຫານ ຄຸ້ມຄອງ, ແມ່ນກະໂຕອຸດສາຫະກຳແບບນາຍທຶນອ້ອຍຕ້ອຍ, ຄືມັນຢູ່ໃນມືຂອງບໍລິສັດຂອງຄົນຢຸໂຣບ ຈຳນວນ

ບໍ່ເທົ່າໃດບໍລິສັດ ແຕ່ຫາກລົງທຶນອັນໃຫຍ່ຫລວງ ຊື້ຊ້າງລາກແກ່ ທັງຕ້ອງໃຊ້ເວລາຄອຍຖ້າຍິດ ແລະຕັດຕົ້ນສັກ ຈົນກວ່າຈະຮອດຍາມຂາຍສົ່ງອອກໄປອິນເດຽ ຫລື ຢຸໂຣບ ໃນຫົກເຈັດປີຕໍ່ມາພຸ້ນ. ແຮງງານໄມ້ສັກ ປະກອບດ້ວຍຄົນຫລາກຫລາຍເຜົ່າ: ຄົນພະມ້າ, ສານ ແລະ ລາວ, ກະຫລຽງ ແລະເຜົ່າພູດອຍອື່ນໆ ຊຶ່ງເຂົ້າເຮັດວຽກໃນລະບົບແຕກຕ່າງຈາກແຮງງານຄົນທະມິນ ໃນສວນຢາງຢູ່ ມະລາຢາ. ທີ່ນັ້ນ ຂະເຈົ້າຢູ່ກັນເປັນຄຸ້ມຄ່ວງ ມີໝໍ ມີໂຮງຮຽນ ເຮືອນພັກຂອງບໍລິສັດຈັດໄວ້ໃຫ້, ບໍລິສັດໄມ້ສັກ ໄດ້ແຮງງານເຫລົ່ານີ້ ໂດຍການນຳເອົາວຽກມາສູ່ຄົນ ແທນທີ່ຈະແມ່ນຄົນໄປຊອກຫາວຽກເຮັດ ແລ້ວຂະເຈົ້າກໍມີແຕ່ຕັດຕົ້ນສັກປ່າ ບໍ່ໄດ້ທຳການປູກທົດແທນ. ດ້ວຍເຫດນີ້ ເຖິງແມ່ນຈະລົງມືຕັດກັນ ຢ່າງກວ້າງຂວາງ ກໍບໍ່ມີຜົນກະທົບຕໍ່ທ້ອງທີ່ ຍົກເວັ້ນທາງດ້ານນິເວດວິທະຍາ. ສ່ວນວ່າຢູ່ບ່ອນທີ່ມີການປູກສ່ວນນັ້ນ ຈະມີຈຸດທີ່ກໍ່ໃຫ້ເກີດການຕັ້ງບ້ານເຮືອນ ແລະດຳເນີນກິດຈະກຳທາງເສດຖະກິດ ທຳອິດ ກໍຢູ່ແຍກຫ່າງກັນ ແລ້ວຕໍ່ມາ ກໍກາຍເປັນຊຸມຊົນໃໝ່ຂະຫຍາຍຕົວຂຶ້ນ.

ກໍລະນີຫລັງນີ້ ອະທິບາຍໄດ້ດ້ວຍສອງແບບຢ່າງ ຄື ຈຳນວນສ່ວນປູກຢູ່ດິນພູເພີ່ມຂຶ້ນຢ່າງຫລວງຫລາຍ ເຊິ່ງເມື່ອກ່ອນນັ້ນ ຢູ່ແຕ່ດ້ານໃນຂອງຊະວາ ກ້ຳຕາເວັນອອກ ແລະ ຕາເວັນຕົກ ຍ້ອນເປັນເງື່ອນໄຂໃຫ້ປະຊາກອນໜາແໜ້ນຂຶ້ນ ແລະ ເສດຖະກິດຂະຫຍາຍຕົວຂຶ້ນນີ້ເອງ ໃນຕົ້ນສັດຕະວັດທີ 20 ຈຳຕ້ອງອາໄສແຮງງານຊາວນາທ້ອງຖິ່ນຫລາຍຂຶ້ນນຳ. ໂດຍປະການນີ້ ສວນຢາງຢູ່ຊະວາ ຈຶ່ງກາຍເປັນປັດໄຈແຫ່ງຄວາມປ່ຽນແປງທົ່ວໄປ ຂອງການກໍ່ສ້າງແຮງງານເຮັດສວນ ໃນຊຸມທົດສະວັດຕໍ່ໆມາ. ຕົວຢ່າງອີກອັນນຶ່ງ ສວນຢາງຢູ່ມະລາຢາ ແລະ ຝັ່ງເຮຊິດັນຊີ ຂອງດອນສຸມາຕຼາ ໃນຊຸມປີ 1850 ນັ້ນ ເລີ່ມຈ້າງແຮງງານທ້ອງຖິ່ນເປັນຈຳນວນຫລາຍໆ ຍ້ອນວ່າປະຊາກອນກໍໜາແໜ້ນຂຶ້ນ ແລະຊາວນາ ຍອມປ່ຽນແປງທ່າທີຂອງຂະເຈົ້າ ຕໍ່ກັບເສດຖະກິດ ແລະ ຍິນດີເຮັດວຽກຮັບຈ້າງ. ການເຮັດສວນໃນອາຊີຕາເວັນອອກສຽງໃຕ້ ນັບວ່າເປັນຍິດໝາຍແຫ່ງຍຸກອານານິຄົມຂຶ້ນສູງສຸດ, ເປັນການປ່ຽນຖ່າຍຈາກ ຕາເວັນຕົກທີ່ເປັນອຸດສະຫະກຳ ດຳເນີນການໂດຍຄົນຕາເວັນຕົກເອງ ມາລົງຢູ່ດິນແດນບ່ອນເປົ່າຫວ່າງຂອງອາຊີຕາເວັນອອກສຽງໃຕ້ ຊຶ່ງບໍ່ເຄີຍມີການຂຸດຄົ້ນໃດໆ ມາກ່ອນ. ດັ່ງນັ້ນ ຈຶ່ງເປັນການຫັນປ່ຽນທີ່ຈຳເປັນ. ໃນເວລາດຽວກັນ ຄົນຈີນ ແລະ ຄົນອາຊີຕາເວັນອອກສຽງໃຕ້, ເອກະຊົນ, ບໍລິສັດ ແລະ ບັນດາລັດຖະບານກໍເລີ່ມຕົ້ນກ້າວເຂົ້າມາເຮັດການບໍລິຫານກິຈະການເອົາເອງ ແລ້ວກໍ່ສ້າງໃຫ້ມີແຮງງານເພີ່ມຂຶ້ນ ແລະ ເພີ່ມຂຶ້ນຈາກພາຍໃນທ້ອງຖິ່ນເອງ. ການເຮັດສວນເລີ່ມຖືກກືນເຂົ້າໄປຢູ່ໃນສະພາບແວດລ້ອມດ້ານເສດຖະກິດຂອງທ້ອງຖິ່ນ ກາຍເປັນເສດຖະກິດໃຫຍ່ສ່ວນຫລາຍ ແລ້ວກໍສູນເສຽເອກະລັກພິເສດດ້ານປະຫວັດສາດຂອງຕົນໄປ. ການເລີ່ມຕົ້ນທີ່ຢຸດໆ ເຊົາໆ ຂອງຍຸກທຳອິດນັ້ນ (ການເຮັດສວນປູກໄມ້ ກໍຫາກແຕກຕ່າງຈາກການຢູ່ແບບກຸ້ມຕົວເອງຢ່າງຂາດຂັ້ນແນວນີ້ແລ້ວ) ໄດ້ມາຮອດຂັ້ນຕອນທີ່ກ້າວໜ້າຂຶ້ນເປັນເງົາຕາມຕົວ (ຄື ຈະມີທັ້ງເລັ່ງທຶນໃຫ້ສູງ ແລະຫລຸດລົງຕ່ຳ, ຂະນາດສວນກວ້າງ ແລະແຄບ) ຈົນເຖິງບ່ອນ ຕັດແບ່ງເປັນທິວທັດເສດຖະກິດ ທີ່ກົມກືນເປັນຊຸະນິດດຽວກັນໄປທົ່ວແຄມ.

ອຸດສະຫະກຳນ້ຳຕານ ຢູ່ ດອນຊະວາ ແລະ ຟິລິບປິນ ກໍນັບວ່າເປັນກິຈະການທີ່ໃຫຍ່ໂຕ ແລະສຳຄັນທີ່ສຸດຂອງ ບໍລິສັດນາຍທຶນ ທີ່ນຳໃຊ້ແຮງງານທ້ອງຖິ່ນ ແທນທີ່ຈະໃຊ້ຄົນຕ່າງດ້າວ. ແຕ່ປີ 1870 ຫາ 1930 ອຸດສະຫະກຳນ້ຳຕານຂອງ ຊະວາ ຂະຫຍາຍຕົວຢ່າງມະຫາສານ ສາມາດສົ່ງອອກ 100.000 ຕັນ ໃນປີ 1865, 750.000 ໃນປີ 1900 ແລ້ວມາເປັນ 3 ລ້ານຕັນ ໃນປີ 1930 ຈົນກາຍເປັນຜູ້ສົ່ງອອກນ້ຳເບີນຶ່ງ ລື່ນໝູ່ຕັ້ງກວ່ໄກຢູ່ໃນ ອິນດີຊເນເທີແລນ ໃນຍຸກນັ້ນ. ຢູ່ດອນຟິລິບປິນ ຂອງນິກະສົດນັ້ນ ເຖິງແມ່ນຈຳນວນໜ້ອຍກວ່າ ແຕ່ກໍຂະຫຍາຍຕົວເຕັມຍິດ ໃນຍຸກເຄິ່ງທີສອງ ຂອງສັດຕະວັດທີ 19 (ຄື 90.000 ໃນປີ 1893) ແຕ່ວ່າຫາກເອື່ອຍລົງໃນພາຍລຸນ. ການຂະຫຍາຍຕົວທີ່ແທ້ຈິງຂອງ ອຸດສະຫະກຳນ້ຳຕານ ຂອງ ຟິລິບປິນ ແມ່ນຕອນໄດ້ຮັບໂຄວຕ້າໃຫຍ່ ໃນລາຄາຄຸ້ມຄອງສູງ ຈາກຕລາດ ສະຫະລັດອະເມລິກາ. ຈາກນັ້ນ ນ້ຳຕານ ກໍກາຍເປັນສິນຄ້າສົ່ງອອກນຳໜ້າ ຂອງຟິລິບປິນ ສາມາດກອບກູ້ເອົາກຳລັງແຮງໃຫ້ຊາວນິກະຣົສ ແລະ ພັດທະນາເປັນອຸດສະຫະກຳຫລັກອັນທີສອງ ຢູ່ເຂດກາງຂອງດອນ ລູຊອນ.

ຕະຫລອດປະຫວັດສາດອັນຍາວນານຂອງມັນ ນ້ຳຕານ ເກືອບວ່າເຄີຍເປັນອຸດສະຫະກຳຂອງນາຍທຶນສະເໜີມາ ຍ້ອນວ່າຄ່າໃຊ້ຈ່າຍດ້ານອຸປະກອນການຜະລິດສູງຫລາຍ (ເຄື່ອງຈັກໃຫຍ່ເພື່ອເຮັດ ນ້ຳຕານ ຢູ່ຟີລິບປິນ ລາຄາປະມານ 1 ລ້ານຫລຽນ ແຕ່ປີ 1921 ພຸ້ນແລ້ວ). ຢູ່ໃນທົ່ວໂລກ ຫລາຍສັດຕະວັດມາແລ້ວ ໄດ້ມີການປູກອ້ອຍ ໂດຍໃຊ້ແຮງງານຈາກພາຍນອກ (ສ່ວນໃຫຍ່ແມ່ນຊາວອ້າຫາຖ). ສະນັ້ນ ຈຶ່ງເປັນເລື່ອງສຳຄັນພິເສດ ທີ່ຢູ່ ຊະວາ ແລະ ຟີລິບປິນ ໄດ້ມີການໃຊ້ແຮງງານທ້ອງຖິ່ນເປັນສ່ວນໃຫຍ່ ຈະໃຊ້ແຮງງານຈາກພາຍນອກ ກໍພຽງແຕ່ໃນບາງລະດູການ. ໃນກໍລະນີຢູ່ຊະວາ ໂຮງງານນ້ຳຕານ ແມ່ນເອົາໄປຕິດຕັ້ງໄວ້ຢູ່ນຳເຂດທີ່ມີປະຊາກອນໜາແໜ້ນ ແລະບ່ອນທີ່ທົ່ງນາມີນ້ຳຫລໍ່ລ້ຽງປູກເຂົ້າ ທີ່ເໝາະກັບການປູກອ້ອຍທີ່ສຸດແລ້ວ. ແຕ່ຕອນຕົ້ນສັດຕະວັດທີ 19 ພຸ້ນ ຊາວນາຊະວາ ກໍບໍ່ໄດ້ສົນໃຈທີ່ຈະ ອອກໄປຮັບຈ້າງ ເຊັ່ນ ດຽວກັບຊາວອາຊີຕາເວັນອອກສຽງໃຕ້ອື່ນໆ ນັ້ນແລ້ວ ແຕ່ປະເພນີດັ້ງເດີມ ຄືການໄປ ອອກແຮງງານລວມໝູ່ນັ້ນ ກໍສາມາດເອົາມາໝູນໃຊ້ ດັດແປງເປັນແຮງງານຮັບຈ້າງໄດ້ໃນພາຍລຸນມາ.

ການນຳໃຊ້ແຮງງານຊາວນາ ໃນອຸດສະຫະກຳນ້ຳຕານ ຢູ່ຟີລິບປິນນັ້ນ ມີປະຫວັດເປັນມາຕ່າງຈາກບ່ອນອື່ນ. ຢູ່ດອນ ລູຊອນ ອ້ອຍໄດ້ກາຍເປັນເຄື່ອງປູກຕົ້ນຕໍ ທົ່ວດິນແດນຂອງຊາວນາໄປແລ້ວ. ສ່ວນວ່າໂຮງງານໃຫຍ່ໆນັ້ນ ບໍ່ໄດ້ມີດິນເປັນຂອງຕົນເອງ ຫລືວ່າ ຈ້າງຄົນງານປະຈຳຢ່າງເຕັມເວລາໄວ້, ແລະກໍບໍ່ຈຳເປັນເຮັດແນວນັ້ນ. ແຕ່ວ່າຊະເຈົ້າເຮັດວຽກຜ່ານສະຫະກອນຫົວໜ້າຄົນງານ ໂດຍມີເຈົ້າຂອງນາ ເຊັ່ນ ສັນຍາຈ້າງເໝົາງານ ໃຫ້ຕາມຈຳນວນຕົ້ນອ້ອຍ, ມີການແບ່ງປັນຂັ້ນຕອນວຽກງານກັນ ລະຫວ່າງ ຫົວໜ້າສະຫະກອນ ແລະເຈົ້າຂອງດິນ ຊຶ່ງແມ່ນຜູ້ປູກອ້ອຍແທ້. ອຸດສະຫະກຳປູກອ້ອຍ ໄດ້ຈະເລີນງອກງາມຂຶ້ນ ໂດຍວິທີນີ້ ແຕ່ກໍສ້າງໃຫ້ມີຂໍ້ຂັດແຍ່ງລະຫວ່າງກັນ ເມື່ອເຖິງເວລາແບ່ງປັນກຳໄລ ຊຶ່ງການຂັດແຍ່ງອັນນີ້ ໄດ້ສະແດງອອກຮອດຢູ່ໃນແນວທາງຂອງພັກການເມືອງຍ້ອນວ່າພວກກຽວກໍມັກມີອຳນາດທາງເສດຖະກິດ ຫລາຍສົມຄວນ. ຍິ່ງໄປກວ່ານັ້ນ ການປູກອ້ອຍໃນລະບົບນີ້ ເຮັດໃຫ້ສາຍພົວພັນລະຫວ່າງ ຫົວໜ້າສະຫະກອນ ກັບເຈົ້າຂອງນາ ກາຍມາເປັນຊະນວນການເມືອງ ແລະການປະຕິວັດ ເລີ່ມແຕ່ຊຸມປີ 1930 ແລະ ຕໍ່ຈາກນັ້ນມາ.

ເລີ່ມມີການປູກອ້ອຍ ຢູ່ ນິກະຣົສ ຈຳນວນຫລາຍຂຶ້ນ ພາຍຫລັງປີ 1855 ເມື່ອທ່າເຮືອ ອິລອຍໂລ ເພື່ອຂ້າມຊ່ອງແຄບໄປສູ່ດອນ ປານາຍ ໄດ້ໄຂຂຶ້ນເພື່ອການຄ້າໂລກ. ໃນເວລານັ້ນ ນິກະຣົສ ມີປະຊາກອນແຕ່ພຽງໜ້ອຍ ແຕ່ພື້ນທີ່ເໝາະສົມສຳລັບປູກອ້ອຍແທ້. ຍ້ອນການຊຸກຍູ້ຂອງບໍລິສັດຂາອອກ-ຂາເຂົ້າ ອັງກິດ ຊາວຈີນລູກຊອດ ຈາກອິລອຍໂລ ຈຶ່ງຂ້າມມາຢູ່ ນິກະຣົສ ແລ້ວສ້າງຕັ້ງໂຮງອົ່ວອ້ອຍຂະໜາດນ້ອຍ ແຕ່ມີປະສິດທິພາບສູງ. ສ່ວນຢູ່ບ່ອນອື່ນໆ ນັ້ນ ເຖິງແມ່ນວ່າ ຈະມີການປູກອ້ອຍຂຶ້ນໄວ ແຕ່ຍ້ອນວ່າ ຊາວຈີນລູກຊອດບໍ່ມີທຶນຫລາຍ ແລະຊະເຈົ້າກໍມັກຮ່ວມວຽກກັບເຈົ້າຂອງນາເອງ ຈະສະບາຍໃຈກວ່າ ດັ່ງນັ້ນ ອຸດສະຫະກຳນ້ຳຕານ ນິກະຣົສ ຈຶ່ງງອກງາມຂຶ້ນ ຍ້ອນເຈົ້າຂອງດິນນາ ແລະຜູ້ເຊົ່າ ເປັນຜູ້ຕັ້ງໂຮງອົ່ວອ້ອຍເອງ ແລະປູກເອງ ເປັນສ່ວນໃຫຍ່. ແຕ່ວ່າ ຍັງມີບັນຫາຢູ່ໜ້ອຍນຶ່ງ ເຊັ່ນ ບາງລະດູການ ແຮງງານຈາກດອນອື່ນໆ ເຂົ້າມາຫລາຍ ໂຮງງານກໍເລີຍເປີດຮັບເອົາຄົນນອກຢ່າງບໍ່ອັ້ນ ຄືກັນກັບຢູ່ ຂົງເຂດທີ່ມີຄົນຫລາຍຂອງ ດອນລູຊອນ. ຢ່າງໃດກໍດີ, ນິກະຣົສ ບໍ່ມີບັນຫາຄືແນວນັ້ນ ລະຫວ່າງພໍ່ຄ້າຄົນກາງ ກັບເຈົ້າທີ່ດິນ ແລະລະຫວ່າງເຈົ້າທີ່ດິນ ກັບຜູ້ເຊົ່າ. ພວກຊະເຈົ້າກໍຢູ່ນຳກັນແບບສະຫງົບມາຕລອດ ເຄິ່ງສັດຕະວັດ ເປັນຢ່າງໜ້ອຍ. ໄຄມວ່າຢູ່ເຂດ ລູຊອນພຸ້ນ.

ອຸດສະຫະກຳສົ່ງອອກ ກາຍເປັນເລື່ອງສຳຄັນຂຶ້ນຢ່າງໄວວາ ລະຫວ່າງປີ 1870 ເຖິງ 1940 ໄວເກີນກວ່າທີ່ຈະຄາດເດົາສະຖິຕິແຫ່ງຄວາມກ້າວໜ້າ ອັນທີ່ເຄີຍມີມາກ່ອນ. ມັນກ້າວມາຢືນເປັນໃຈກາງຂອງ ປະຫວັດສາດດ້ານເສດຖະກິດ ແລະສັງຄົມແຫ່ງຍຸກສະໄໝອານານິຄົມ ມີອິດທິພົນສູງຍິ່ງໃຫຍ່ ແລະກໍມີອິດທິພົນຕໍ່ການຂະຫຍາຍຕົວຂອງສ່ວນອື່ນໆ ຂອງໂລກນຳ. ມັນມີທັງດ້ານໄດ້ຮັບ ແລະໄດ້ປະກອບສ່ວນສ້າງຄວາມເຂັ້ມແຂງໃຫ້ແກ່ "ໂຄງຮ່າງລະບົບລາຊະການ" ຊຶ່ງພວມຂະຫຍາຍຕົວໃນເວລານັ້ນ. ການຂະຫຍາຍຕົວຂອງການສົ່ງອອກ ໄດ້ສ້າງສັນຊີວິດເສດຖະກິດອັນໃໝ່ອຽມ ໃນອາຊີຕາເວັນອອກສຽງໃຕ້ ເຮັດໃຫ້

ຕ້ອງຂຶ້ນກັບຕະຫລາດໂລກ ຊຶ່ງມີຜົນພວງໃນລະຍະຍາວ ທີ່ດຶງໄປສູ່ໄລຍະວິກິດການ. ແມ່ນແທ້ວ່າ ການຂະ ຫຍາຍຂອງການສົ່ງອອກ ໄດ້ຊ່ວຍສ້າງພື້ນຖານເສດຖະກິດໃຫ້ ແລະຊຸກຍູ້ຢ່າງແຮງ ຕໍ່ການເຕີບໃຫຍ່ ຂອງຕົວເມືອງ ແລະອັນນີ້ເອງ ສົ່ງໃຫ້ເປັນຜົນພວຍໄດ້ ເຮັດໃຫ້ຊາວອາຊີຕາເວັນອອກ ສຽງໃຕ້ ມີຄວາມ ຕ້ອງການການສຶກສາແບບສະໄໝໃໝ່ ອັນເປັນການພັດທະນາທີ່ພວກຂະເຈົ້າເອງ ໄດ້ເປັນຜູ້ຕັດສິນປະຫວັດ ສາດຂອງຊາດຕົນ ຢູ່ໃນສັດຕະວັດທີຊາວ. ການສົ່ງອອກໄດ້ດຶງດູດເອົາຄົນຕ່າງ ດ້າວເຂົ້າມາໃໝ່ ເສີມສ້າງ ໃຫ້ຊຸມຊົນມີຄວາມຫລາກຫລາຍຕື່ມ ຈົນກາຍເປັນຈຸດພິເສດຂອງຍົງເຂດນີ້ ໃນສະໄໝນັ້ນ ແລ້ວກໍເລີຍກາຍ ເປັນວ່າ ນຳເອົາບັນຫາຍັດຍ່ອງອັນຮຸນແຮງມາໃຫ້ ໃນຊຸມປີ 1930 ແລະ ຫລັງຈາກນັ້ນ.

ຢ່າງໃດກໍດີ ບໍ່ແມ່ນແຕ່ຄວາມຮຸ່ງເຮືອງສູງສຸດຂອງການສົ່ງອອກນັ້ນດອກ ທີ່ນຳພາໄປສູ່ຄວາມ ປ່ຽນແປງດ້ານເສດຖະກິດໃນຍຸກນັ້ນ, ມີການເຄື່ອນໜັ່ງອັນສຳຄັນອີກຫລາຍດ້ານ ທີ່ບໍ່ຂຶ້ນກັບການກ້າວກະ ໂດດຂອງການສົ່ງອອກພຽງຢ່າງດຽວ. ເລື່ອງນີ້ ແມ່ນເປັນຄວາມຈິງແທ້ໆ ທີ່ເກີດຂຶ້ນກັບຊີວິດ ເສດຖະກິດ ຂອງຊາວນາມະຫາຊົນຈຳນວນຫລາຍ ຂອງຍົງເຂດນີ້.

ມາຮອດປີ 1940 ການປ່ຽນແປງໃຫຍ່ດຳເນີນມາໄດ້ເຈັດປີແລ້ວ, ເສດຖະກິດສົ່ງອອກ ໄດ້ເປັນ ເຈົ້າການນຳໜ້າ ຢູ່ໃນທົ່ວອາຊີຕາເວັນອອກ, ແຕ່ກໍຍັງມີການສົງໄສຢູ່ວ່າ ມີຊາວນາຮອດ 50% ບໍ ທີ່ໄດ້ມີ ສ່ວນຊຸກຍູ້ໂດຍກົງ ຕໍ່ການຜະລິດສົ່ງອອກ ? ຍັງມີຄົນສ່ວນໜ້ອຍກວ່ານັ້ນ ພໍພຽງແຕ່ເປັນຊາວກະເສດ ໃນບາງລະດູການ. ອີກຈຳນວນນຶ່ງກໍໄດ້ຖືກປ່ຽນແທນ ໂດຍກຸ່ມຄົນທີ່ມີຄວາມກ້າວໜ້າກວ່າດ້ານແຮງງານ ນັ້ນກໍຄືພວກຢຸໂຣບ ຈີນ ແລະ ອິນເດຽ ທີ່ຫລັ່ງໄຫລເຂົ້າມາ. ຢ່າງໃດກໍດີ ນັບວ່າຊີວິດເສດຖະ ກິດຂອງຊາວນາໃນຍົງເຂດ ເກືອບໝົດທຸກຄົນກໍໄດ້ປ່ຽນແປງໄປຫລາຍ ໃນໄລຍະສາມສ່ວນສີ່ ຂອງທ້າຍ ສັດຕະວັດທີ 19. ຫລາຍໆລ້ານຄົນ ມີຄວາມເປັນຢູ່ດີຂຶ້ນຕາມລຳດັບ ຄ່ອຍໆປ່ຽນໄປເກືອບບໍ່ເຫັນແຈ້ງໆ ແຕ່ກໍເປັນຂະບວນ ໃຫຍ່. ຕາມກະແສແລ້ວ ຜະລິດຕະພັນສົ່ງອອກຂອງຊາວນາ ແມ່ນພໍດີຕອບສະໜອງ ໃຫ້ແກ່ກຳລັງຍູ້ດັນ ໃຫ້ເກີດວາດແວວຂອງຊີວິດໃໝ່ຢູ່ໃນຊຸມຊົນ.

ຄິດໄລ່ແລ້ວ ມີຢູ່ສາມປັດໄຈສຳຄັນ ທີ່ຕັດສິນຄວາມປ່ຽນແປງຄັ້ງນີ້ ນຶ່ງແມ່ນການເປີດຕົວອອກສູ່ ເສດຖະກິດໂລກ ຄືຕອບສະໜອງຄວາມຕ້ອງການດ້ານສິນຄ້າສົ່ງອອກໃຫ້ໂລກພາຍນອກ ແຕ່ເວລາດຽວກັນ ກໍນຳເຂົ້າສິນຄ້າບໍລິໂພກສຳລັບຂະເຈົ້າເອງ. ເມື່ອມີສິນຄ້າແນວນັ້ນເຂົ້າມາຮອດ ກໍເກີດການໄຫລວຽນຂອງ ສິນຄ້າເຂົ້າສູ່ພາຍໃນທ່າເຮືອໃຫຍ່ ຕະຫລອດເຖິງການກໍ່ສ້າງໂຄງລ່າງ ຖະໜົນ ແລະ ຕາບ່າງຕະຫລາດ. ຄອບຄົວຊາວນາ ພໍແຕ່ເສືອດຕາບ້ອຍແນມເຫັນສິນຄ້າໃໝ່ ຕ່າງກໍຊອກຫາວິທີ ຈະຫາເງິນໂດຍວິທີໃໝ່, ຍອມເປືອຍຕີນເປັນກຸລີຮັບຈ້າງ, ແລ້ວບາດນີ້ ກໍກ້ານບ່ງໂສ້ງສັ້ນ ເພື່ອຈະໃຫ້ໄດ້ ສົ່ງອອກຢ່າງພາລາ ຫລື ເຂົ້າ. ຊາວນາເລີ່ມຊົມໃຊ້ຜ້າແພຈາກອິນເດຽ ແລະ ຊື້ເຄື່ອງປັ້ນດິນເຜົາຈາກຈີນ ໝາຍຄວາມວ່າ ພ້ອມທີ່ ຈະຊື້ສິນຄ້າໃໝ່ຢ່າງໄວວາ ແລະ ມີເງິນພໍ. ພໍຮອດຊຸມປີກ້າວສູ່ສັດຕະວັດໃໝ່ ປະເພດສະບູຕ່າງໆ ກໍອອກໄປ ທົ່ວຊົນນະບົດຂອງສະຫຍາມ ເພື່ອປ່ຽນແທນຜະລິດຕະພັນພື້ນບ້ານຂອງຂະເຈົ້າແລ້ວ. ນົມຂຸ້ນ ການົມເມດ ເປັນທີ່ນິຍົມຫລາຍໃນພະມ້າ ຈົນວ່າຊາວບ້ານເອົາກະປ໋ອງນົມເກົ່າ ໄປໃຊ້ເປັນອັດຕາວັດແທກມາດຕະຖານ ຜອງເຂົ້າຂາຍຢູ່ຕາມຊົນນະບົດ; ນ້ຳມັນກາດ ພໍຖືກນຳເຂົ້າ ໃນຊຸມປີ 1860 ພຽງແຕ່ສິບປີໃຫ້ຫລັງ ກໍຂາຍ ໄດ້ເປັນລ້ານໆແກລອນ ແລ້ວພໍມາຮອດທ້າຍສັດຕະວັດທີ 19 ຕະກຽງນ້ຳມັນກາດ ກໍຂັບໄລ່ນ້ຳມັນໜາກ ພ້າວ ແລະ ນ້ຳມັນວົກ ຊຶ່ງເຄີຍໃຊ້ມາແຕ່ບູຮານນັ້ນ ອອກໄປໝົດ ໃນທົ່ວອາຊີຕາເວັນອອກສຽງໃຕ້. ຜ້າແພ ຕ່ຳດ້ວຍເຄື່ອງຈັກ, ກັບຍີດໄຟ ຕະຫລອດຮອດຈັກຫຍິບຜ້າ ແລະ ລົດຖີບ ລ້ວນແຕ່ໄດ້ຮັບຄວາມນິຍົມໄວ ແລະ ກວ້າງຂວາງຫລາຍ.

ປັດໄຈສຳຄັນທີສອງ ທີ່ຕັດສິນຄວາມປ່ຽນແປງໃຫຍ່ ກໍແມ່ນກະໂຕແນວທາງນະໂຍບາຍຂອງ ລັດ ຖະບານໂຮ່ເມືອງຂຶ້ນເອງ. ຢູ່ພະມ້າ ໄດ້ມີນະໂຍບາຍກຽວກັບທີ່ດິນແບບອັງກິດ ເຮັດໃຫ້ພວກເຈົ້າຂອງດິນ ແລະຜູ້ອອກເງິນກູ້ ສາມາດຄຸ້ມຄອງດິນນາໃນພາກໃຕ້ພະມ້າເກືອບທັງໝົດ ຕັ້ງແຕ່ 1940 ມາ. ຢູ່ມາລາຢາ ອອກກົດໝາຍ ມາເລຣິເສັບເວຊັນ ປີ 1913 ແລະ ຢູ່ອິນດີຊເນເຫັຍ ກໍອອກແຕ່ປີ 1870 ຊ່ອຍໃຫ້ຊາວນາ

ນ້ອຍ ສາມາດຮັກສາຜົນປະໂຫຍດຂະເຈົ້າຕະຫລອດມາ ຊຶ່ງກໍເປັນແບບແຕກຕ່າງກັນໄປ ເປັນທຳມະດາ. ແນ່ນອນ ເມື່ອຊາວນາຕ້ອງການຄຸ້ມຄອງທີ່ດິນໃຫ້ໄດ້ຮັບຜົນປະໂຫຍດດີຂຶ້ນ, ໃຫ້ການເກັບກ່ຽວດີຂຶ້ນ, ການເກັບພາສີກໍສູງຂຶ້ນນຳ ຊາວນາຕ້ອງການເງິນສົດໄປຈ່າຍຄ່າພາສີ ຈຶ່ງຕ້ອງຊອກຫົນທາງ ທຳມາຫາກິນໃຫ້ຫລາຍຂຶ້ນ. ການເຮັດຮ່ອງລະບາຍນ້ຳ ແລະເອົານ້ຳເຂົ້ານາ, ການປ້ອງກັນພະຍາດ ຕ່າງໆ, ການສຳປະທານທີ່ດິນຂອງລັດ ເກືອ ແລະການຜູກຂາດອື່ນໆ ໃຫ້ກັບເອກະຊົນຢຸໂຣບ, ເຮັດໃຫ້ ການໃຊ້ແຮງງານເກນໝົດສິ້ນໄປ ທັງໝົດເຫລົ່ານີ້ ມີຜົນກະທົບໃສ່ຊີວິດເສດຖະກິດຂອງຊາວນາ.

ປັດໄຈທີສາມ ແມ່ນການເພີ່ມຂຶ້ນຂອງພົນລະເມືອງຢ່າງໄວວາ ແລະທະວີຄູນຫລາຍ. ຈາກ 55 ລ້ານຄົນ ໃນປີ 1870 ມາເປັນ 145 ລ້ານ ໃນປີ 1940. ໂດຍສະເພາະຊາວຈີນ ການເຄື່ອນຍ້າຍແຮງງານ ມີສ່ວນກະທົບໃສ່ການເພີ່ມຂຶ້ນຢ່າງຫລວງຫລາຍ ສ່ວນໃຫຍ່ກໍມາຈາກທີ່ອັດຕາການຕາຍຫລຸດລົງ, ອັດຕາການເກີດຜັດສູງຂຶ້ນ. ໃນປີ 1940 ຂົງເຂດນີ້ມີຄົນຢູ່ອາໄສ ບໍ່ຕ່າງຫຍັງກັບ ຕະຫລອດປະຫວັດສາດອັນຍາວນານຂອງຂະເຈົ້າ ຄືມີຄົນຕ່າງດ້າວທີ່ເປັນອິນເດຽ ກັບຈີນເທົ່ານັ້ນ, ແຕ່ບາດແລ້ວ ກໍມີການອົບພະຍົບເຂົ້າມາຢ່າງລົ້ນເຫລືອ ຈົນເປັນວິກິດການ. ຕົວຢ່າງທີ່ຮ້າຍແຮງທີ່ສຸດ ແມ່ນຢູ່ ຊະວາ, ປີ 1870 ມີປະຊາກອນແຕ່ 17.5 ລ້ານຄົນ ແລະມີດິນເປົ່າຫວ່າງຢູ່ຫລາຍ; ພໍມາຮອດປີ 1940 ມີ 48 ລ້ານຄົນ ແລະ ດິນປູກຝັງ ໄດ້ທັງໝົດ ກໍຖືກນຳໃຊ້. ແມ່ນແຕ່ຢູ່ປະເທດທີ່ມີຄົນໜ້ອຍ ເຊັ່ນສະຫຍາມ ປະຊາກອນເພີ່ມຈາກ 6 ມາເປັນ 15 ລ້ານ ໃນລະຍະດຽວກັນ ການທະວີຂຶ້ນສ່ຳນັ້ນ ກໍນັບວ່າມີພະລັງພຽງພໍທີ່ຈະກະທົບໃສ່ການປ່ຽນແປງ ຊີວິດເສດຖະກິດຂອງຊາວນາ.

ເມື່ອກ່າວເຖິງຜົນກະທົບຕໍ່ກຳລັງແຮງງານໃໝ່ ຄົນທັງຫລາຍມັກກ່າວເຖິງຊາວນາ ຄືດັ່ງເປັນຝ່າຍຮັບ ແທນທີ່ຈະແມ່ນຝ່າຍກະທຳ, ເນື່ອງຈາກວ່າ ພວກຂະເຈົ້າກໍເປັນພຽງຝ່າຍຮັບ ຫລືຖືກກະທຳແທ້, ເຊັ່ນວ່າ ໄດ້ຮັບການດູແລດ້ານສຸຂະພາບດີຂຶ້ນ, ໄດ້ຂະຫຍາຍການເຮັດນາ ເຮັດສວນ, ແຕ່ເວລາດຽວກັນ ກໍຍັງເປັນເຍື່ອທີ່ອ່ອນແອ ຕ້ອງອີງອາໄສການຜູກຂາດ ເຊັ່ນຢູ່ອິນດູຈີນ ແມ່ນເກືອ ແລະເຫລົ້າ, ຢູ່ພະມ້າ ຊາວນາຕ້ອງສູນເສຍທີ່ດິນໄປໝົດ, ຢູ່ຊະວາ ແລະ ລູຊອນ ທີ່ດິນຖືກຕັດແຍກເປັນຕອນເລັກຕອນນ້ອຍ. ນັ້ນແມ່ນເລື່ອງຈິງ; ດ້ວຍຫລາຍໆວິທີ ຊາວນາຖືກກວາດລ້າງໄປຕາມກະແສກຳລັງການຜະລິດເສດຖະກິດ ຊຶ່ງຂະເຈົ້າເອງບໍ່ມີວັນຈະຄາດຫວັງ ຫລືເຂົ້າໃຈຫຍັງເລີຍ. ຖ້າຫາກວ່າ ນັກປະຫວັດສາດຫລຽວເບິ່ງ ຊາວນາສ່ຳກັບວ່າເປັນສັງຄົມທີ່ຖືກໂຍນຫລົ້ນ ໂດຍນະໂຍບາຍການເມືອງ ຖານະ ແລະໂອກາດຂອງ ຂະເຈົ້າ ກໍບໍ່ອາດອຳນວຍໃຫ້ໄດ້ເປັນຜູ້ເລືອກເອົາເອງວ່າ ອັນໃດຜິດ ອັນໃດຖືກ ເປັນການປະຕິເສດ ບໍ່ໃຫ້ຂະເຈົ້າມີສິດໃນການສ້າງປະຫວັດສາດຂອງຊາດຕົນເອງເລີຍ. ຄວນຈະຕ້ອງເບິ່ງຄືນໃໝ່ເບິ່ງວ່າ ຜົນກະທົບສ່ວນຫລວງຫລາຍ ຕໍ່ການປ່ຽນແປງດ້ານເສດຖະກິດຂອງຊາວນາໃນອາຊີຕາເວັນອອກສຽງໃຕ້ນັ້ນ ຄວນແມ່ນ: ຂະເຈົ້າ ໄດ້ຕອບໂຕ້ອັນຕະລາຍ ຫລືກຳເອົາການລະໂອກາດຄືແນວໃດ ? ເວົ້າງ່າຍໆກໍຄື ມັນມີການຕອບໂຕ້ຂອງຂະເຈົ້າເອງ ຢ່ສາມແບບນຳກັນ.

ຮູບແບບນຶ່ງ ທີ່ຊາວນາໄດ້ຕອບຮັບການປ່ຽນແປງ ກໍແມ່ນການຮັບເອົາຄວາມຊິນເຄີຍອັນໃໝ່ ທຳຕົວຄຸ້ນເຄີຍກັບເສດຖະກິດ ເງິນສົດ ? ບໍ່ໜາຍວ່າ ກະທຳການແບບຄົນໃນເມືອງ ຫລືຊາວຕ່າງດ້າວ ແຕ່ຫາກໝູນໃຊ້ເງິນສົດ ຕາມພາລະກັບບົດບາດເສດຖະກິດຂອງຕົນນັ້ນເອງ. ໂດຍທົ່ວໄປຊາວນາ ໃນອາຊີຕາເວັນອອກສຽງໃຕ້ ກໍບໍ່ຖືວ່າ ເງິນນັ້ນຄືກັບເປັນຄຸນຄ່າມາດຖານອ້ອຍຕ້ອຍ ແຕ່ເຫັນວ່າມັນເປັນພຽງ ພາຫະນະທີ່ເພີ່ມເຂົ້າມາ ບໍ່ແມ່ນຄືທີ່ດິນ, ເຂົ້າ ຫລື ການຖືກເກນແຮງງານເພື່ອສັງຄົມແຕ່ຢ່າງໃດ, ຕົວຢ່າງວ່າ ໃຊ້ເງິນໃນການແລກປ່ຽນທາງເສດຖະກິດໄດ້. ເມື່ອຄຶດດັ່ງນັ້ນ ເງິນຈຶ່ງມີຄຸນຄ່າທີ່ເໜັງຕີງ ໃຊ້ຈ່າຍງ່າຍ, ບໍ່ໄດ້ມີຄວາມໝາຍທາງສັງຄົມ ພໍທີ່ຈະມາກີດຂວາງການໃຊ້ຈ່າຍມັນ ແລະຍັງສາມາດເອົາໄປຈ່າຍຢູ່ນອກຂອບເຂດບ້ານຂອງຕົນໄດ້ນຳອີກ. ຊາວນາກໍໄດ້ຈັດໃຫ້ເງິນເປັນສິ່ງສະສົມທາງເສດຖະກິດ ເພື່ອໃຊ້ໃນການເພີ່ມພູນເທົ່າທີ່ຈະໜູນອຽນໄດ້ ເວລາທີ່ຕ້ອງການ ແຕ່ກໍຍັງບໍ່ຕັ້ງຕໍ່ແຕ່ເງິນສົດນີ້ ຢ່າງດຽວ.

ຂະເຈົ້າຍັງຮູ້ຈັກຈັດສັນເປັນກ້ອນເງິນປະຢັດພິເສດຂອງບ້ານ ເພື່ອໄວ້ຈ່າຍຄ່າພາສີ ແລະຊື້ສິນຄ້າ ຂາເຂົ້າທີ່ໜ້າດຶງດູດໃຈ ຊຶ່ງຕ້ອງຈັດຊື້ດ້ວຍເງິນສົດ ຫລືຕົວແທນຂອງເງິນເທົ່ານັ້ນ. ວິທີນຶ່ງ ກໍແມ່ນຈ່າຍເປັນຫຸ້ນສ່ວນຂະໜາດນ້ອຍ ເພື່ອສົ່ງອອກສິນຄ້າ, ແຕ່ໃນຫລາຍໆທ້ອງຖິ່ນ ຊາວນາກໍນິຍົມປູກພືດຜັກ ທີ່ຂາຍໄວ ຫລືເຮັດການຜະລິດແບບຄອບຄົວ ດ້ວຍຈຸດມຸ່ງໝາຍອັນດຽວກັນ ຄືເປັນການຫາລາຍໄດ້ເພີ່ມ ເຊັ່ນ: ຢູ່ພະມ້າພາກກາງ ເຮັດນ້ຳມັນງາ ແລະພືດຜັກອື່ນໆ, ຢູ່ຫວຽດນາມ ເປັນສາດປູນອນ ແລະຕັ່ງຫວາຍ, ຢູ່ ຊະວາ ປູກຜັກທຸກຊະນິດ, ຢູ່ ລູຊອນ ປູກຕົ້ນຢາ ພາຍຫລັງທີ່ລັດຖະບານໄດ້ຢຸດເຊົາການຜູກຂາດແລ້ວ. ດົນຕາມດົນ ຊາວນາ ກໍລົ້ງກັບການອອກໄປນອກບ້ານເກີດ ເພື່ອຂາຍແຮງງານ.

ການຕອບຮັບຕໍ່ເສດຖະກິດແບບໃໝ່ອີກແນວນຶ່ງ ຊຶ່ງກະທົບຕໍ່ຊີວິດຂະເຈົ້າ ກໍແມ່ນການອົບພະຍົບ, ສ່ວນໃຫຍ່ແມ່ນເພື່ອໄປສະແຫວງຫາເງິນລາຍໄດ້ ແຕ່ກໍບໍ່ແມ່ນທຸກກໍລະນີ. ຮູບແບບທີ່ງ່າຍດາຍກວ່າໝູ່ ແມ່ນການເຄື່ອນທີ່ໄປເຮັດວຽກຕາມລະດູການ ໂດຍສະເພາະຍາມເກັບກ່ຽວ ອັນນີ້ເຫັນຫລາຍຢູ່ພະມ້າ ແລະ ໂກແຊງຊິນ ໄປເຮັດວຽກໃນຂົງເຂດອຸດສະຫະກຳປູກເຂົ້າ, ມາຮອດຕອນຂ້າມສູ່ສັດຕະວັດໃໝ່ ຈຶ່ງມີຄົນງານ ຈຳນວນຫລາຍ ຫັນໄປສູ່ການເຮັດສວນຕົ້ນໄມ້: ຊາວຊະວາ ໄປຮອດຝັ່ງຕາເວັນອອກຂອງ ຝັ່ງເຮຊິເດັນຊີ ຂອງສຸມາຕຼາ ແລະ ຈົນຮອດ ສຸຣິນາມ; ຊາວນາຈາກຫວຽດນາມພາກເໜືອ ໄປເຮັດ ສວນຢາງຢູ່ໂກແຊງ ຊິນ ແລະ ນິວກາລິໂດເນຽ ຫລືບ່ອນອື່ນໆ ໃນເກາະດອນປາຊີຟິກ; ຄົນຟິລິບປິນ ໄປຮອດຮາວາຍ, ເກາະ ກວມ ແລະ ເຂົ້າໄປຮອດສະຫະລັດອະເມລິກາ. ສ່ວນນຶ່ງ ການອົບພະຍົບຖືກບັງຄັບ ແລະຄວບຄຸມໂດຍກົນໄກ ຝ່າຍດຽວ ປານວ່າຖືກໂທດໃຫ້ເຊັນສັນຍາຮັບຈ້າງ ຈັ່ງຊັ້ນແຫລະ. ແຕ່ຄວາມຈິງແລ້ວ ແມ່ນຄວາມສະໝັກ ໃຈ, ຢູ່ໃນເຂດທີ່ມີປະຊາກອນຫລາຍ ມັນກໍແມ່ນທາງອອກຂອງຊາວນາເອງ ເພື່ອແກ້ບັນຫາຄວາມກົດດັນ ຕໍ່ເລື່ອງທີ່ດິນ. ໃນຕົ້ນສັດຕະວັດທີ20, ຊາວນາອົບພະຍົບມາຢູ່ໃນຕົວເມືອງ ແມ່ນພໍດີເໝາະກັບການທີ່ຕ້ອງ ການຫລາກຫລາຍຮູບແບບການລ້ຽງຊີບ ເຊັ່ນ ບາງຄົນກໍໄປຮັບຈ້າງ ຕາມເຮືອນ, ຖີບສາມລໍ້, ເປັນສະ ໝຽນຂັ້ນນ້ອຍ, ຂາຍເຄື່ອງຕາມແຄມຖະໜົນ ປະໃຫ້ຄົນຈີນ ຫລືອິນເດຽ ເຂົ້າເຮັດວຽກຢູ່ທ່າເຮືອ ຫລືໂຮງ ງານ. ຈົນວ່າຢູ່ໄປດົນ ກາຍເປັນຄົນໃນເມືອງໄປແລ້ວ ຫລືວ່າແມ່ນພວກ ທີ່ມາຮອດໃໝ່ໆ ຄົນພື້ນເມືອງ ຈຶ່ງເລີ່ມປ່ຽນແທນເຂົ້າໄປເຮັດວຽກອຸດສະຫະກຳ, ຊ່ວງເສັ້ງກັນກັບຄົນຕ່າງດ້າວ ດັ່ງທີ່ເກີດຂຶ້ນຢູ່ຢາງກຸ້ງ ໃນ ຊຸມປີ 1930 ຫລືວ່າເຂົ້າປ່ຽນແທນພວກນັ້ນ ເມື່ອເວລາທີ່ຂະເຈົ້າ ຍົກລະດັບຕົວເອງຂຶ້ນ ຢູ່ໃນຖານະທາງ ສັງຄົມອັນໃໝ່ແລ້ວ.

ເວົ້າແທ້ກໍແມ່ນ ຈົນມາຮອດນຶ່ງ ຫລືສອງທົດສະວັດ ກ່ອນປີ 1940 ຊາວນາເຫລົ່ານີ້ ຈຶ່ງຄ່ອຍໆ ຫລຸດຄວາມລັງເລໃຈທີ່ຈະອອກຈາກບ້ານ ມາຫາເງິນຢູ່ໃນເມືອງ. ໃນເວລານັ້ນ ກໍມີຊາວນາຈຳນວນທີ່ຍັງ ຢູ່ບ້ານ ຊຶ່ງຍັງມີຫົວນິຍົມປະເພນີເດີມ ແຕ່ກໍປ່ຽນແປງໄປອີກແບບນຶ່ງ ຄ້າຍຄືກັບການອົບພະຍົບ ຄືຂະເຈົ້າ ກ້າຍ້າຍທີ່ໄປຢູ່ໃກ້ບ່ອນທີ່ບໍ່ເຄີຍມີຄົນຢູ່ມາກ່ອນ. ຢູ່ຊາຍແດນບ່ອນປູກເຂົ້າ ປາກແມ່ນ້ຳອິຣະວະດີ, ເຈົ້າ ພະຍາ ແລະປາກແມ່ນ້ຳຂອງ ຊຶ່ງໄດ້ກາວເຖິງມາແລ້ວ, ແລະກໍຍັງມີກໍລະນີສຳຄັນອື່ນໆອີກ. ບາງແຫ່ງ ກໍ ເປັນການອົບພະຍົບຕາມແບບຂະບວນບູຮານ. ຊາວນາຫວຽດນາມ ທີ່ເຄື່ອນລົງມາທາງໃຕ້ ຮອດປາກ ແມ່ນ້ຳ ແລະອ້ຽວເໜືອໄປທາງຊາຍແດນກຳພູຊາ ກໍແມ່ນປະຕິບັດຕາມປະເພນີ ການອົບພະຍົບ ທີ່ມີມາ ເປັນພັນປີ ຄືຈາກເໜືອລົງມາໃຕ້. ຊາວຊະວາ ທີ່ຍ້າຍເຂົ້າໄປໃນດອນກ້ຳຕາເວັນຕົກ ໄປຮອດລຳປຸ ແລະ ໃຕ້ສຸດຂອງດອນສຸມາຕຼາ ແລ້ວກໍໄປຮອດບາງສ່ວນຂອງດອນບໍນຽວ, ເຊເລເບັສ ແລະ ມະລາຢາ ນັ້ນກໍ ແມ່ນດຳເນີນຮອຍຕາມບັນພະບຸລຸດ ທີ່ພາກັນໜີອອກຈາກເຂດທີ່ມີປະຊາກອນ ໜາແໜ້ນຫລາຍ ດັ່ງທີ່ ເຄີຍເກີດຂຶ້ນມາແລ້ວໃນສະໄໝສັດຕະວັດທີ 16 ແລະ 17. ສ່ວນການອົບພະຍົບ ໃໝ່ໆ ກໍມີຊາວອິໂລກາໂນ ຈາກແຄມຝັ່ງ ໃນສັດຕະວັດທີ 19 ແລະ 20. ຜູ້ຄົນໄດ້ອົບພະຍົບໄປຢູ່ ລູຊອນ ຕອນເໜືອ, ຢາຍກັນໄປທົ່ວ; ຊາວບິຊາຢັນ ເລີ່ມຍ້າຍໄປຢູ່ແຄມຝັ່ງທາງເໜືອ ແລະຕາມທົ່ງແຄມແມ່ນ້ຳໃຫຍ່ໆ ຂອງມິນດາເນົາ ໃນສະ ໄໝດຽວກັນ. ຊາວມາດູຣິສ ກໍຍ້າຍມາຢູ່ຝັ່ງຕາເວັນອອກຂອງຊະວາ ເຊັ່ນດຽວກັນ.

ຮູບແບບການຕອບຮັບຄວາມປ່ຽນແປງອັນທີສາມ ຂອງຊາວນາ ກໍແມ່ນການເພີ່ມທະວີຜົນຜະລິດທາງກະເສດ ອັນນີ້ເບື້ອງຕົ້ນແມ່ນເກີດຈາກ ແຮງຊຸກດັນຂອງປະຊາຊົນເອງ ແລະກໍເກີດຂຶ້ນສະເພາະ ໃນບ້ານຂອງຂະເຈົ້າເອງ. ຊາວນາໄປຮັບເອົາແນວເຂົ້າໃໝ່ໆ ຈາກທ້ອງຖິ່ນອື່ນມາ ຫລືແນວພັນໃໝ່ ຖົ່ວດິນ, ມັນຕົ້ນ ແລະສາລີ. ຂະເຈົ້າເລີ່ມປູກພືດສວນຄົວໃນທົ່ງນາຍາມລະດູແລ້ງ ຫລືເຮັດນາຊຸງ, ຫລືວ່ານຳໃຊ້ທົ່ງນານ້ຳຖ້ວມລ້ຽງປາ; ຂະເຈົ້າປູກຕື່ມຂຶ້ນໆ, ຮູ້ຈັກກະກຽມຕົກກ້າຢູ່ໃນເຮືອນກ່ອນຈະນຳໄປດຳໃສ່ທົ່ງນາ; ປູກມັນຕົ້ນໃສ່ຕາມຄັນນາ ຄາດໄຖໃຫ້ດີ ແລະຫລົກຫຍ້າຢ່າງທົ່ວເຖິງ. ໂດຍວິທີນີ້ ກໍສາມາດເພີ່ມຜົນຜະລິດຕໍ່ເຮັກຕາໄດ້ ໃນຂະນະດຽວກັນ ປະຊາກອນກໍເພີ່ມຂຶ້ນ. ຂະເຈົ້າຍັງສາມາດ ສ້າງລາຍຮັບສະເລ່ຍຕໍ່ຫົວຄົນໄດ້ສູງຂຶ້ນ ໝາຍຄວາມວ່າ ມີນ້ຳສ້າງໜ່ວຍດຽວ ແຕ່ຫລາຍຄົນກໍຍັງໃຊ້ຮ່ວມກັນໄດ້ໃນທົ່ວທຸກຍົ້ງເຂດ ແລະສ່ວນໃຫຍ່ແມ່ນຢູ່ຊຸະວາ ມີການຂະຫຍາຍຕົວແຮງດ້ານກະສິກຳ ມີຜົນກະທົບໃສ່ບໍ່ແມ່ນແຕ່ພາກປະຕິບັດເທົ່ານັ້ນ ແຕ່ທຸກໆດ້ານຂອງຊີວິດຊາວນາ. ການເຊົ່າດິນ ແລະ ເຊົ່າຕໍ່ກັນ ນັບມື້ຫລາຍຂຶ້ນ, ການເຊົ່າດິນ - ປູກຝັງ ແລະແລກປ່ຽນແຮງງານເພີ່ມຂຶ້ນ ເພື່ອເຮັດແນວໃດໃຫ້ ເນື້ອທີ່ປູກຝັງນັ້ນ ສາມາດຮັບໃຊ້ພຽງພໍແກ່ຄົນຈຳນວນຫລາຍຂຶ້ນ. ຢູ່ດອນຊະວາ ແມ່ນເປັນກໍລະນີພິເສດແທ້ໆ. ແຕ່ວາ ເຖິງຈະມີຄວາມສະດວກອັນສຸດຂີດ ໃນຂະບວນການນີ້ ຊຶ່ງຊາວນາຊະວາ ກໍພຽງແຕ່ຮັບເອົາຢ່າງສະຫງົບ ແຕ່ກໍເປັນເຖິງຊ່ອງຫວ່າງທີ່ເຂົ້າມາຜັນແຍກຮູບແບບຊີວິດ ທີ່ຂະເຈົ້າເຄີຍດຳລົງຢູ່ໃນປະຫວັດສາດ ອັນຍາວນານຂອງຕົນ, ແລ້ວຂະເຈົ້າກໍຕ້ອງຖືກພັດພາໄປຕາມ ກະແສຟອງຂອງອຸທຸກກະໄພ ທີ່ຂະເຈົ້າບໍ່ສາມາດຈະຄວບຄຸມມັນໄດ້ເລີຍ.

24/7 VII

ຫ້າມຈຳໜ່າຍ

# ພາກທີ IV

# ການປ່ຽນແປງດ້ານສັງຄົມ ແລະ ການກຳເນີດ ຂອງລັດທິຊາດນິຍົມ

# ບົດທີ 23 ອະລຳພະບົດ

ດັ່ງທີ່ ນັກຂຽນ ເລື່ອງອັນໂດ່ງດັງວ່າດ້ວຍການຂະບົດຂອງຊາວນາ ໃນອານານິຄົມຊະວາກ້ຳ ຕາເວັນຕົກ ໄດ້ຕັ້ງຂໍ້ສັງເກດໄວ້, ເຖິງຢ່າງໃດກໍດີ ເຖິງແມ່ນວ່າ ປະຫວັດສາດຂອງຊົນຊັ້ນຊາວນາ ຖືກບົດບັງ ດ້ວຍກິດຈະກຳຂອງຜູ້ຍິ່ງໃຫຍ່ ມີອຳນາດກໍຕາມ ປະຫວັດສາດນັ້ນກໍຍັງຄົງບັນຈຸກະແສຕ່າງໆ ທີ່ໄຫລທອດ ຕໍ່ມາຮອດຍຸກສະໄໝໃໝ່. ບໍ່ມີປາກົດການອື່ນໃດ ທີ່ເກີດຂຶ້ນ ແລະເປັນເງົາຕິດຕາມ ການປົກຄອງອັນເຂັ້ມ ງວດ ຂອງຊາວຕາເວັນຕົກ ນອກຈາກການລຸກຮືຂອງຊາວນາ ກະຈັດກະຈາຍຢູ່ໃນບາງທ້ອງຖິ່ນ ແລະສ່ວນ ໃຫຍ່ ເປັນລະຍະສັ້ນໆ. ຍ້ອນວ່າ ສຽງຂອງຊາວນາ ມັກຖືກຖ້ວມລຶບອຶນເຂົ້າຢູ່ໃນສຽງຮ້ອງຄາງ ຂອງກິດຈະ ກຳອັນສຳຄັນ ຈຶ່ງມີຫນ້ອຍຄັ້ງ ທີ່ ເລື່ອງທຳນອງນີ້ ໄດ້ຮັບຄວາມເອົາໃຈໃສ່ເທົ່າທີ່ຄວນ ຈາກນັກສັງເກດ ການອານານິຄົມ ແລະຈາກສາຍຕາຂອງນັກ ປະຫວັດສາດ ຍຸກປັດຈຸບັນ ຜູ້ມັກເບິ່ງຊາວນາວ່າ ເປັນຜູ້ຖືກ ຊັກຈູງໃຫ້ໄປທາງຜິດທັງເປັນຄວາມປ່ວງບ້າຢ່າງນຶ່ງ. ການລຸກຮືຂອງຊາວນາ ໃນສະໄໝປັດຈຸບັນ ຄືກັນ ກັບໃນອະດີດ ເກືອບບໍ່ແມ່ນ "ພວກຊາດນິຍົມ" ເລີຍ. ການນຳໃຊ້ສັບນີ້ ຈຶ່ງບົດບັງເອກະລັກ ອັນສຳຄັນ ຫລາຍຢ່າງ ຂອງຂະບວນການຊາວນາ. ຖ້າຫາກວ່າ ຕ້ອງຮັກສາເລື່ອງອັດຕາສ່ວນໄວ້ແລ້ວ ຂະບວນການ ເຫລົ່ານັ້ນ ອາດເຫັນໄດ້ແຈ້ງກວ່າ ໃນຖານະວ່າເປັນສ່ວນນຶ່ງຂອງເຫດການຕໍ່ເນື່ອງອັນຍາວນານ ໃນປະ ຫວັດສາດ ໃນນັ້ນ ຄວາມບໍ່ພໍໃຈຂອງຊາວນາ ໄດ້ສະແດງອອກຢູ່ທຸກບ່ອນ ແລະທຸກຄັ້ງທີ່ພວກເຂົາໄດ້ຜູ້ນຳ ເປັນນັກຕໍ່ຕ້ານຝ່າຍກົງກັນຂ້າມກັບອຳນາດການປົກຄອງ. ນັກປະຫວັດສາດຜູ້ນຶ່ງ ໄດ້ບັນຍາຍເຖິງເຫດ ການເຫລົ່ານັ້ນ ວ່າເປັນ "ການປະຕິວັດ ເນື່ອງຈາກຄວາມໂກດແຄ້ນ ອັນນັບມື້ນັບສູງຂຶ້ນ "ໃນສະຕະວັດ ທີສິບເກົ້າ ແລະຕົ້ນສະຕະວັດທີຊາວ ຄວາມໂກດແຄ້ນລະເບີດຂຶ້ນ ສ່ວນໃຫຍ່ເກີດຈາກຄວາມເບື່ອຫນ່າຍ ນັບມື້ນັບຫລາຍຂຶ້ນ ຕໍ່ການປົກຄອງຂອງພວກນັກໂທ່ເມືອງຂຶ້ນຕາເວັນຕົກ ທັງໃນເລື່ອງເສດຖະກິດ ແລະ ການເຂົ້າແຊກແຊງເລື່ອງ ສັງຄົມສົງເຄາະ ແລະຄ່ານິຍົມອື່ນໆ ຂອງຊາວນາ. ການລຸກຮືຂອງຊາວນາ ສະແດງອອກເຖິງ ການຕໍ່ຕ້ານຄວາມປ່ຽນແປງແຫ່ງຍຸກສະໄໝ ຫລາຍກວ່າຄວາມຕ້ອງການ ເພື່ອອະນາ ຄົດເພື່ອກໍ່ສ້າງສັງຄົມຄືນໃຫມ່ ເຖິງວ່າໄດ້ເນັ່ງແນໃສ່ອຳນາດການປົກຄອງຂອງພວກໂທ່ເມືອງຂຶ້ນກໍຕາມ ຂະບວນການຂອງຊາວນາ ກໍຍັງຢູ່ໄກ ທີ່ຈະບັນລຸຈຸດຫມາຍຂອງຕົນ ນອກໄປຈາກການປັບປຸງສະຖານະ ພາບປັດຈຸບັນຂອງຕົນເອງ ນັ້ນຄື ການປົດປ່ອຍຄວາມໂກດແຄ້ນອອກໄປ. ເຖິງແມ່ນວ່າຂະບວນການຂອງ ຊາວນາ ມີລັກສະນະ ແລະເຈດຕະນາແຕກຕ່າງກັບ ລັດທິຊາດນິຍົມ ເຊິ່ງກໍ່ເກີດຈາກພື້ນຖານໃນເມືອງ, ຂະບວນການນີ້ ກໍຫາກມີບົດບາດສຳຄັນຄຽງຄູ່ ກັບຝ່າຍຫລັງນີ້ຢູ່ ເຊິ່ງທັງສອງໄດ້ເດີນຄຽງຂະຫນານກັນ ເລື້ອຍໆ ແລະໃນບາງຄັ້ງ ກໍໄດ້ຫລໍ່ລ້ຽງ ແລະຫລອມຕົວເຂົ້າກັບສິ່ງທີ່ກືນກິນມັນໄວ້.

ເຖິງແມ່ນວ່າ ຄວາມໂກດແຄ້ນຂອງຊາວນາໄດ້ສະແດງອອກມາຫລາຍເທື່ອຫລາຍທີ ຢູ່ໃນອາຊີຕາ ເວັນອອກສຽງໃຕ້ ອັນເປັນຜົນຮັບໂດຍກົງ ຫລື ໂດຍທາງອ້ອມ ຈາກການແຊກແຊງ ຂອງຊາວຕາເວັນຕົກ ມັນກໍຍັງມີຄວາມແຕກຕ່າງກັນຢູ່ຫລາຍອັນ. ມີຄວາມເປັນໄປໄດ້ ທີ່ຈະຈຳແນກລັກສະນະສະເພາະ ເຊິ່ງ ຖ້າຫາກວ່າ ບໍ່ແມ່ນ ອັນທີ່ມີຮ່ວມກັນ ເບິ່ງກໍຄືວ່າ ແມ່ນລັກສະນະປະຈຳຕົວ ທີ່ຖືກຕ້ອງອັນນຶ່ງຢູ່. ສ່ວນ ຫລວງຫລາຍແລ້ວທັງຫມົດນັ້ນ ຕາມຄຳນິຍາມ ປາກົດວ່າ ແມ່ນເລື່ອງກ່ຽວກັບການຈັດສັນທີ່ດິນ ທີ່ເກີດ ຂຶ້ນຢູ່ໃນເຂດຊົນນະບົດ ຖ້າມກາງຜູ້ຄົນ ທີ່ກ່ຽວຂ້ອງກັບການມີອາຊີບເຮັດກະສິກຳ ຕາມປະເພນີ. ຂະບວນ ການເຫລົ່ານີ້ ຍັງມີທ່າອຽງເປັນຂອງທ້ອງຖິ່ນສູງ ເຖິງແມ່ນວ່າ ການເຕົ້າໂຮມກັນໄດ້ສະມາຊິກປະມານ ຫລາຍພັນຄົນ ກໍຕາມ, ການຈັດຕັ້ງ ກັບຫົວຫນ້າ ກໍເກືອບວ່າ ບໍ່ຂະຫຍາຍອອກໄປໄກກວ່າເຂດໃກ້ຄຽງເລີຍ. ໂດຍທົ່ວໄປ ຄວາມໂກດແຄ້ນຂອງຊາວນາ ເຊິ່ງຫລາຍເທື່ອກໍມັກເປັນການຕອບໂຕ້ຕໍ່ການການແຊກແຊງ ແບບ ປິຕາທິປະໄຕ(ໃຊ້ບົດບາດຂອງພໍ່) ແລະນະໂຍບາຍສັງຄົມສົງເຄາະ ແບບທາງການເກີນໄປ ເພື່ອປະ ເມີນ ຫລື ຄວາມບໍ່ເອົາໃຈໃສ່ຕໍ່ການປະພຶດຮຸນແຮງ ທີ່ອາດຖືກຕີລາຄາວ່າ ໄດ້ແຜ່ລາມກວ້າງຂວາງ

ຫລາຍກວ່າການລຸກຮືແທ້ໆ. ໃນບ່ອນທີ່ການລຸກຮື ແຕກຫນ່ໍ່ຈ່ໍ່ຈາວຈາກອັນເດີມ ກໍມັກເປັນ ການຕອບສະ ຫນອງ ຕ່ໍ່ຜູ້ເປັນຫົວຫນ້ໍ່າ ທີ່ຢູ່ເຫນືອຄົນທໍ່າມະດໍ່າ. ມີຫນ້ອຍເທ່ື່ອ ທ່ີ່ຜູ້ນໍ່າຂອງຊໍ່າວນໍ່າ ຈະມໍ່າຈໍ່າກສ່ິ່ງທ່ີ່ ເອ້ີ່ນກັນວ່ໍ່າ ຄົນຊ້ັ່ນສູງຂອງຊ່ິ່ນນະບົດ ເຊ່ັ່ນວ່ໍ່າ ເຈ້ົ່າທ່ີ່ດິນຜູ້ຮ່ັ່ງມ່ິ, ພະນັກງ່ໍ່ານລັດຖະບ່ໍ່ານ ຊ້ັ່ນນ້ອຍລະດັບ ບ້ໍ່ານ ຫລ່ື ຜູ້ນໍ່າທ່ໍ່າງສ່ໍ່າສະຫນ່ໍ່າ. ໂດຍທ່ົ່ວໄປ ສະພ່ໍ່າວະຂອງຄວ່ໍ່າມເປັນຫົວຫນ້ໍ່າ ມ່ິເອກະລັກຢູ່ບ່ອນ ມັກໃຫ້ຄວ່ໍ່າມສ່ໍ່າຄັນ ແກ່ສ່ິ່ງທ່ີ່ເປັນຮູບແບບຕ່ໍ່ານປະເພນ່ິ ຫລ່ໍ່ານກວ່ໍ່າສ່ິ່ງທ່ັນສະໄຫມ ແລະຕອບສະຫນອງ ຄ່ືນ ດ້ວຍຮູບແບບອ່ັນຄ່ົ້ງທ່ຽງທ່ີ່ເຄ່ີຍຮູ້ກ່ັນມ່ໍ່ານກ່ອນ (ຫລ່ື ຄ່ຶດຢ່ົ້ນເອ່ົ້ໍ່າ) ການລຸກຮ່ືຫລ່ໍ່ານຄ້ັ້ງ ມ່ິນ້ໍ່າສຽງ ທ່ີ່ແຝ່ງຄວ່ໍ່າມເຊ່ື່ອຖ່ືທ່ໍ່າງສ່ໍ່າສະຫນ່ໍ່າ ຫລ່ື ເພ່ື່ອສ່ໍ່າສະຫນ່ໍ່າອ້ອຍຕ້ອຍ ແລະບ່ໍ່າງເທ່ື່ອ ກໍ່ແມ່ນເພ່ື່ອສະ ແຫວ່ໍ່ງຫ່ໍ່າແນວທ່ໍ່າງບ່ໍລ່ິສຸດ ແລະກ່ານປະຕ່ິຮູບ ຫລ່ື ກ່ານກໍ່ານ່ົດຮູບແບບໃຫມ່ ທ່ັ່ງນ່ີ້ ເພ່ື່ອສ້ໍ່າງເງ່ື່ອນໄຂ ຕ້ອນຮ່ັບກ່ານກ່ັບມ່ໍ່າຂອງພະເຈ້ົ່າ ຫລ່ື ເພ່ື່ອຮ້ອງຮ່ຽກຮ້ອງ ຫ່ໍ່າລ່ັດແບບສ່ົມບູນ.

ມ່ິຕ່ົວຢ່ໍ່າງຢູ່ແຕ່ເລ່ັກນ້ອຍ ເພ່ື່ອອະທ່ິບ່ໍ່າຍ ທ່ັ່ງຄວ່ໍ່າມແຕກຕ່ໍ່າງ ແລະຄວ່ໍ່າມຄ້ໍ່າຍຄ່ຽງກ່ັນ ຂອງຂະ ບວນກ່ານຊ່ໍ່າວນ່ໍ່າ. ໃນເມ່ືອງ ໂບລຮ່ໍ່າ ເຂດຊະວ່ໍ່າພ່ໍ່າກກ່ໍ່າງ ເມ່ື່ອປະມ່ໍ່ານປ່ີ 1890, ແນວຄວ່ໍ່າມຄ່ຶດ ກ່ັບ ຄວ່ໍ່າມເຊ່ື່ອຂອງ ຊ່ໍ່າວບ້ໍ່ານຄົນນ່ຶ່ງທ່ີ່ກ່ຶກຫນ່ັ່ງສ່ື ແຕ່ມ່ີຖ່ໍ່ານະດ່ີ ຊ່ື່ ສຸ່ຣອນຕ່ິໂກ ຊ່ໍ່າມ່ິນ (Surontiko Samin) ເລ່ີ່ມດ່ຶ່ງດູ່ດສ່ໍ່າວ່ົ່ກ ຈ່ໍ່າກບ້ໍ່ານເກ່ີດຂອງເຂ່ົ້ໍ່າເອ່ງ ກ່ັບບ້ໍ່ານໃກ້ຄ່ຽງອ່ື່ນໆ. ເຖ່ິງແມ່ນວ່ໍ່າ ສະຖ່ໍ່ານະກ່ານຕອນ ຫລ່ັ່ງໆ ຂອງຂະບວນກ່ານ ຂອງ ຊ່ໍ່າມ່ິນ ແນ່ນອນວ່ໍ່າ ກ່ຽວຂ້ອງກ່ັບຄວ່ໍ່າມພະຍ່ໍ່າຍ່ໍ່າມ ໃນເລ່ື່ອງກ່ານບ່ໍລ່ິ ຫ່ໍ່ານຂອງພວກດ່ັດຊ໌ ເມ່ື່ອຕ້ົ້ນສະຕະວ່ັດທ່ີຊ່ໍ່າວ ເພ່ື່ອກ່ານຈ່ັດຕ່ັ້ງຄ່ືນໃຫມ່ຢູ່ຂ້ັ້ນບ້ໍ່ານ ແລະກ່ານປ່ຽນແປງ ໂຄງສ້ໍ່າງພ່ໍ່າສ່ີ, ແຮງກະທ່ົບອ່ັນທ່ໍ່າອ່ິດຂອງມ່ັນ ຍ່ັງຄ່ົ້ງມຸ່ມມ່ິອຢູ່. ປະມ່ໍ່ານປ່ີ 1905 ເປ່ັນຕ້ົ້ນມ່ໍ່າ ພວກນ່ິຍ່ມ ຊ່ໍ່າມ່ິນ ເຮ່ັດໃຫ້ພວກດ່ັດຊ໌ ສ່ົນໃຈຫລ່ໍ່ານຢ່ົ້ນ ອ່ັນເປ່ັນຜ່ົນມ່ໍ່າຈ່ໍ່າກກ່ໍ່ານຖອນໂຕອອກຈ່ໍ່າກ ກ່ິດລະບຽບ ທ່ໍ່າງສ່ັ່ງຄ່ົມ ແລະຂອງລ່ັດຖະກ່ານ ໂດຍປະຕ່ິເສດກ່ານປະກອບສ່ວນ ໃສ່ທະນ່ໍ່າຄ່ໍ່ານເຂ່ົ້ໍ່າຂອງບ້ໍ່ານ ແລະ ສະຖ່ໍ່າບ່ັນກະສ່ິກ່ໍ່າ ຊ້ັ່ນຊຸມຊ່ິນອ່ື່ນໆ, ດ້ວຍກ່ານປະຕ່ິເສດວ່ິທ່ີກ່ານແຕ່ງດອງ ແບບອ່ິສະລ່ໍ່ານ ແລະດ້ວຍ ກ່ານຢ່ືນຢ່ັນ ເນ່ັ້ນຢ່ໍ່ໍ້າວ່ໍ່າ ຖ້ໍ່າວ່ໍ່າຕ້ອງຈ່ໍ່າຍພ່ໍ່າສ່ີຕ່ໍ່າງໆ ຕ້ອງໃຫ້ຖ່ືວ່ໍ່າ ພ່ໍ່າສ່ີເຫລ່ໍ່ານ່ັ້ນ ແມ່ນກ່ານບ່ໍລ່ິຈ່ໍ່າກ ບ່ໍ່ແມ່ນພ່ັນທະ. ມ່ໍ່ານຮອດປ່ີ 1907 ເມ່ື່ອຂະບວນກ່ານ ຂອງຜູ້ນ່ິຍ່ມຊ່ໍ່າມ່ິນ ຢ່ົ້ນແຮງສຸ່ດນ່ັ້ນ ປະມ່ໍ່ານວ່ໍ່າ ມ່ີສະ ມ່ໍ່ານຊ່ິກ 3,000 ຄົນເທ່ົ່ານ່ັ້ນ ແຕ່ພວກດ່ັດຊ໌ ມ່ັກເບ່ິ່ງວ່ໍ່າ ເປ່ັນອ່ໍ່ານ"ຄວ່ໍ່າມປ່ວ່ໍ່ງບ້ໍ່ໍ"ແບບນ່ຶ່ງ ແລະເປ່ັນ ກ່ານຂະບ່ົດ, ເຖ່ິງວ່ໍ່າຂະບວນກ່ານບ່ໍ່ຮຸນແຮງ ແລະມ່ີຄວ່ໍ່າມລະມ່ັດລະວ່ັງ ພວກດ່ັດຊ໌ ກໍ່ຍ່ັງຢ້ໍ່ານເກ່ີດກ່ານ ລຸກຮ່ືຢູ່ທ່ົ່ວໄປຫລ່ໍ່ານກວ່ໍ່າເກ່ົ່ໍ່າ. ຊ່ໍ່າມ່ິນ ກ່ັບພ່ັກພວກຜູ້ໃກ້ຊ່ິດຂອງເຂ່ົ້ໍ່າ ຖ່ືກຂ່ັບໄລ່ອອກໄປຢູ່ຫມູ່່ເກ່ືອນ ເຂດ ນອກສຸ່ດ (Outer Island). ເປ່ັນໄປໄດ້ວ່ໍ່າ ຊ່ໍ່າວນ່ໍ່າບ່ໍ່າງຄົນ ເຫ່ັນຊ່ໍ່າມ່ິນ ເປ່ັນ "ຣ່ໍ່າຕູ ອ່ໍ່າດ່ິລ" ຫລ່ື ເຈ້ົ່ໍ່າຊ່ໍ່າຍ ຜູ້ນ່ຶ່ງ ຕ່ໍ່ານຄວ່ໍ່າມເຊ່ື່ອ ຂອງຊ່ໍ່າວຊະວ່ໍ່າ ໃນເລ່ື່ອງກ່ານກ່ັບມ່ໍ່າຂອງຜູ້ມ່ີບຸນ. ມ່ີແນວບ່ົ່ງຊ່ີ້ຕ່ົວຈ່ິງ ແຕ່ໜ້ອຍ ຄ່ຽວ ວ່ໍ່າ ອ່ໍ່າດແມ່ນຂະບວນກ່ານ ຍຸກພະເຈ້ົ່ໍ່າລ່ົງມ່ໍ່າໂຜດ. ກ່ານເນລະເທດ ຊ່ໍ່າມ່ິນ ບ່ໍ່ໄດ້ຍຸ່ຕ່ິຂະບວນກ່ານ ທ່ີ່ຍ່ັງສ່ືບຕ່ໍ່ເກ່ີດຢ່ົ້ນ ຢ່ໍ່າງກະຈ່ັດກະຈ່ໍ່າຍ ຢູ່ໃນຕ່ົວເມ່ືອງ ມ່ໍ່າຈ່ົນຮອດຊຸມປ່ີ 1920 ແລະລຸນຫລ່ັ່ງ ມ່ໍ່າອ່ິກ, ໂດຍ ທ່ົ່ວໄປ ຂະບ່ວນກ່ານນ່ີ້ ມ່ັກເກ່ີດຢ່ົ້ນຢູ່ໃນບ່ອນໃດ ທ່ີ່ພ່ົບເຫ່ັນວ່ໍ່າ ມ່ີກ່ານຮ່ົບກວນໃນເລ່ື່ອງພ່ໍ່າສ່ີໃຫມ່, ກ່ິດລະ ບຽບໃຫມ່ ກ່ຽວກ່ັບກ່ານເກ່ັບກູ່ເຄ່ື່ອງປ່ໍ່າຂອງດ່ົ່ງ ພ່ວຍໃຕ້ກ່ິດຫມ່ວຍແກ້ໄຂໃຫມ່ ແລະອ່ັນອ່ື່ນໆ ທ່ີ່ຄ້ໍ່າຍຄ່ືກ່ັນ.

ພ່ໍ່າສ່ີທ່ີ່ດິນ ທ່ີ່ບ່ັງຄ່ັບໃຊ້ໃຫມ່ ກໍ່ແມ່ນສ່ໍ່າເຫດກະທ່ັນຫ່ັນອ່ັນນ່ຶ່ງ ຂອງສ່ິ່ງທ່ີ່ເອ້ີ່ນວ່ໍ່າ "ໂຕະ ຈ່ັ່ງກຸ່ດ (To Janggut) ຫລ່ື ກ່ານຂະບ່ົດຊ່ໍ່າວນ່ໍ່າ ຢູ່ໃນເມ່ືອງ ປ່ໍ່າຊ່ິຣ ພູເຕະ ແຂວ່ງ ກ່ໍ່າລ່ິມ່ັນຕ່ັນ ເມ່ື່ອປ່ີ 1915 ມ່ັນເປ່ັນກ່ານຂະບ່ົດໃນລະດ່ັບທ້ອງຖ່ິ່ນ ທ່ີ່ເຮ່ັດໃຫ້ ນ່ັກປ່ົກຄອງອ່ັງກ່ິດ ເປ່ັນກ່ັງວ່ົນໃຈໃນທ່ັນທ່ີ ເມ່ື່ອໄດ້ເຫ່ັນ ລ່ໍ່າງ ບອກວ່ໍ່າຈະເກ່ີດສ່ິ່ງນ່ຶ່ງ ທ່ີ່ຮ້ໍ່າຍກວ່ໍ່າກ່ານລຸກຮ່ື ໃນທ່ົ່ວລ່ັດ ຫລ່ື ອ່ໍ່າດທ່ົ່ວໄປໃນກ່ົ່ວດອນມ່ໍ່າລະຢ່ໍ່າ. ບ່ໍ່ມ່ີ ຫລ່ັກຖ່ໍ່ານບ່ົ່ງຊ່ີ້ວ່ໍ່າ ກ່ານລຸກຮ່ືແບບນ່ີ້ຈະເກ່ີດຢ່ົ້ນໃນມ່ໍ່ໆ. ກ່ານຂະບ່ົດຂອງຊ່ໍ່າວນ່ໍ່າ ປ່ໍ່າກ່ິດຕ່ົວອອກ ຄ່ືກ່ັບວ່ໍ່າ ມ່ັນກ່ໍ່ເກ່ີດຈ່ໍ່າກຫລ່ໍ່ານໆສະພ່ໍ່າບກ່ານສ່ັບປ່ັນກ່ັນ. ໃນເວລ່ໍ່າທ່ີ່ຫ່ົວໜ້ໍ່າເຂດຕ່ໍ່ານປະເພນ່ິ ພ່ວມຮ່ົ່ວມຮ້ອນຫວ່ໍ່າດ ກ່ົວຕ່ໍ່ກ່ານສູ່ນເສ່ຽອ່ໍ່ານ່ໍ່າດ ທ່ີ່ໄດ້ນ່ໍ່າເອ່ົ້ໍ່າລະບ່ົບກ່ານປ່ົກຄອງອ່ັນໜ້ໍ່າຈ່ັບໃຈຂອງອ່ັງກ່ິດ ເຂ້ົ້ໍ່າມ່ໍ່າໃຊ້ນ່ັ້ນໄດ້ ມ່ີກ່ານກ່ໍ່ານ່ົດຄ່ໍ່າເຊ່ົ່ໍ່າດ່ິນໄວ້ແທນພ່ໍ່າສ່ີ ທ່ີ່ຕ້ອງຈ່ໍ່າຍລ່ວງໜ້ໍ່າກ່ານເກ່ັບກ່ຽວຜ່ົນຜະຫລ່ິດ ຂະນະທ່ີ່ປະຈ່ໍ່າ ຕ່ໍ່ານແຫນ່ງ ເປ່ັນຜູ້ຊ່ວຍເຈ້ົ່ໍ່າເມ່ືອງມ່ໍ່າເລ ຈ່ໍ່າກອ່ິກລ່ັດນ່ຶ່ງ. ທ່ໍ່ານ ຣ່ໍ່າຊ່ິ ມ່ໍ່າຕ ຣ່ໍ່າດສ່ັນ ເຊ່ົ່ໍ່າງເປ່ັນທ່ີ່ຮ້ ຈ່ັກກ່ັນດ່ີ

ໃນນາມ" ໂຕະ ຈັງກູຕ (TO JANGUTT) ຊາວນາອາວຸໂສເຈົ້າຂອງທີ່ດິນ ແລະເປັນພໍ່ຄ້າເຮືອພາຍທີ່ມີ ບຸກຄະລິກຫນ້າເຊື່ອຖື ໄດ້ຮັບການຊຸກຍູ້ສົ່ງເສີມແບບລັບໆ ຈາກພວກຫົວຫນ້າເຂດ ໄດ້ລະດົມຂະບວນຊາວ ນາ ໄປໂຈມຕີ ແລະເຜົາທ້ອງການເມືອງ ເປັນການປະທ້ວງຄັດຄ້ານລະບົບພາສີໃຫມ່ ແລະມີຮອດຂ່າວລື ວ່າເອົາກອງທັບ ລ່ອງລົງມາທາງແມ່ນ້ຳ ມຸ່ງຫນ້າ ສູ່ເມືອງຫລວງ ໂກຕາ ບາຮູ. ຄວາມຈິງ ມີຊາວນາ ເຂົ້າມາກ່ຽວຂ້ອງໂດຍກົງ ກັບການກໍ່ຂະບົດຄັ້ງນີ້ ບໍ່ຮອດ 200 ຄົນຊ້ຳ ແລະເຖິງຈະບໍ່ສົງໄສເລີຍວ່າຊາວນາ ພວກອື່ນໆໃນລັດນັ້ນກໍບໍ່ມັກລະບອບ ພາສີໃຫມ່ ແຕ່ກໍຍັງຂາດຫລັກຖານ ຄືກັນກັບການລຸກຮືຂຶ້ນຂອງຊາວ ນາທົ່ວໆໄປ. ດ້ວຍຄວາມຕື່ນຕົວ ຍ້ອນເຫດການ ຍັດຢຶບຄຳສັ່ງ ຂອງທະຫານກອງນຶ່ງຢູ່ ສິງກະໂປ ແລະ ຍ້ອນໄດ້ຮັບລາຍງານອັນສັບສົນ ຈາກລັດການີມັນຕັນ ພວກອັງກິດ ຈຶ່ງສົ່ງກອງທະຫານຣາບ (ບັກ) ຈາກ ກອງພັນ ຊຣອບຊາຍຣ໌ (Shropshire Light Infantry) ແລະເຮືອປືນໃຫຍ່ໄປຍັງລັດນັ້ນ ແລະສາມາດ ປາບການລຸກຮືຂອງຊາວນາ ໃຫ້ແຕກພ່າຍໄປຢ່າງໄວວາ ພາຍໃນ ເດືອນນັ້ນ ໂຕຈັງກູຕ ກັບຊາວນາອີກ ຈຳນວນນຶ່ງ ຖືກຂ້າຕາຍ ແລະນີ້ກໍເປັນອະວະສານຂອງຂະບວນການນີ້ ເຖິງວ່າມີຜູ້ບໍ່ດີໃຈ ແຕ່ຢ່າງຫນ້ອຍ ກໍແມ່ນສະແດງອອກຢ່າງເປີດແປນຂອງມັນ.

ຣະຊາຍະ ຊານ (Hsaya San) ຫົວຫນ້າຂະບົດຊາວນາ ປີ 1930 ໃນພາກໃຕ້ ພະມ້າ ບໍ່ຄືກັບ ຊາ ມິນ ແລະ ໂຕ ຈັງກູຕ ເຂົາບໍ່ແມ່ນຊາວນາ ແຕ່ເປັນຜູ້ເຄີຍບວດຮຽນ, ໃນທ້າຍຊຸມປີ 1920 ເຂົາໄດ້ສຶກອອກ ມາ ແລະສຳຫລວດສະພາບຄວາມທຸກ ຍາກຂອງຊາວນາ ໃຫ້ອົງການພຸທະສາສະຫນາສາຂານຶ່ງ ຂອງ ສະພາໃຫຍ່ແຫ່ງສະມາຄົມຊາວພະມ້າ. ຣະຊາຍະຊານ ເມື່ອຖອຍອອກຈາກເມືອງ ພໍໃຫ້ຄືແລ້ວ ໄດ້ຣີບໂຮມ ເອົາຊາວນາຈຳນວນນຶ່ງ ໃນເຂດເມືອງ ທວາຣະວະດີ ກໍ່ຕັ້ງກຸ່ມ ຂະບົດຕໍ່ຕ້ານຂຶ້ນ ຕາມແບບປະເພນີແນວ ໃຫມ່. ຣະຊາຍະຊານ ປະກາດຕົນເອງວ່າ ເປັນເຊື້ອສາຍລູກຫລານກະສັດພະມ້າ ທີ່ເປັນພຸດທະສາສະນິກ ຫມາຍຄວາມວ່າ ສົມທົບການຖືສິດສືບທອດເຊື້ອສາຍ ໃສ່ກັບ "ເມືອງຫລວງ" ປ່າແຫ່ງນຶ່ງ ເຂົາໄດ້ເຮັດໃຫ້ ຄວາມມຸ່ງມາດຂອງຊາວນາ ເປັນຮູບຮ່າງໃກ້ຄວາມຈິງຂຶ້ນ ບໍ່ພຽງແຕ່ເພື່ອກຳຈັດປັດເປົ່າ ຄວາມທຸກຍາກ ຂອງຊາວນາ (ຢູ່ບາງເຂດ ເກີດຈາກຄວາມຕົກຕ່ຳທາງເສດຖະກິດ) ແຕ່ແມ່ນເພື່ອສ້າງຄືນອະດີດ ຕາມ ມະໂນນຶກ. ການບຸກໂຈມຕີ ສະຖານີຕຳຫລວດ, ຫ້ອງສຳນັກງານໃຫຍ່ ຂອງປ່າໄມ້ ແລະຄຸ້ມເຮືອນພັກພະ ນັກງານ ທີ່ເຮັດວຽກຢູ່ໃນເຂດປົກຄອງ ອານານິຄົມ ເລີ່ມຕົ້ນຂຶ້ນ ເປັນການລຸກຮື ທີ່ອັງກິດ ຕ້ອງໃຊ້ເວລາຢູ່ ປີເຄິ່ງ ເພື່ອປາບປາມລົງ.

ເກືອບໃນເວລາດຽວກັນນັ້ນ ຢູ່ບໍລິເວນຍອດແມ່ນ້ຳ ເຣຢາງ ໃນ ສາຣາວັກ ຫົວຫນ້າຊົນເຜົ່າ ດາຢັກ ຊື່ ອະຊູນ (Asun) ຜູ້ເຄີຍເປັນນາຍບ້ານ ຢູ່ລະຍະນຶ່ງ ສະໄຫມ ການປົກຄອງ ຂອງ ບຣູກ (Brooke) ໄດ້ຈັດ ຕັ້ງກອງກຳລັງຖືອາວຸດ ລຸກຮືຂຶ້ນ. ສາເຫດອັນກະທັນຫັນ ຂອງການກໍ່ຈາລະຈົນຄັ້ງນີ້ ແມ່ນມາຈາກລາຄາ ເຄື່ອງປ່າຂອງດົງຕົກຕ່ຳ (ເຊິ່ງ ເສດຖະກິດສຳຄັນສ່ວນນຶ່ງ ຂອງເຂດ ອິບານ ຂຶ້ນນຳ), ພ້ອມດຽວກັນກໍມີ ອຸບັດເຫດຫລາຍຢ່າງເກີດຂຶ້ນ ຍ້ອນການຄວບຄຸມເຄັ່ງຄັດ ຂອງຝ່າຍບໍລິຫານ ໃນເລື່ອງການຈູດເຜົາປ່າ ເຮັດໄຮ່, ການນຳໃຊ້ລະບຽບ ໃບອະນຸຍາດຖືປືນ ແລະການຕັ້ງເຂດປ່າສະຫງວນ ເຊິ່ງລະເມີດສິດທິຕາມ ປະເພນີ ໃນການຊົມໃຊ້ໄມ້ ແລະແຫລ່ງນ້ຳ. ໃນສາຍຕາຂອງ ຝ່າຍປົກຄອງອານານິຄົມແລ້ວ ການລຸກຮື ນີ້ ບໍ່ຊົງວ່າ ຊິມີຄວາມສຳຄັນຢ່າງໃດ ມີເຮືອນຍາວປະມານໂຫລປາຍ ຖືກເຜົາ ມີຄົນຈຳນວນຫນ້ອຍນຶ່ງ ຖືກ ຂ້າຕາຍ ແຕ່ມັນກໍເຮັດໃຫ້ ຝ່າຍປົກຄອງວຸ່ນວາຍ ຢູ່ຈົນຮອດ ປີ 1940, ແປດປີ ລຸນຫລັງອາຊຸນ ຍອມຈຳນົນ ແລະຫລົບຫນີໄປຢູ່ພາກອື່ນຂອງປະເທດ. ຍັງມີຂະບວນການແບບໃຫມ່ອີກ ເຊິ່ງໃນນັ້ນ ມີຊາວນາຈຳນວນ ຫລາຍເຂົ້າຮ່ວມ ແຕ່ມັນກໍ່ຫວອດຂຶ້ນຈາກໃນເມືອງ, ການເລີ່ມຕົ້ນມີອິດທິພົນ ຂອງຕາເວັນຕົກ ມີພວກ ກາຣດຽ ດີ ອໍເນີ (guardia de honor) ເຮັດເປັນຕົວຢ່າງ ໃນຟີລິບປິນ ແລະພວກ ເຈົ້າດາຍ ໃນຫວຽດ ນາມ. ພວກ ກາຣດຽ ດີ ອໍເນ ສ້າງຕັ້ງຂຶ້ນ ໃນຊຸມປີ 1880 ໂດຍ ນັກບວດ ໂດມີນີກັນ ຢູ່ ລູຊອນ ໃນນາມ ສາວົກຜູ້ຈົງຮັກພັກດີ ຕໍ່ພະແມ່ມາຣຽ ຜູ້ບໍລິສຸດ ແລະຖືກນັກບວດທ້ອງຖິ່ນຊົມໃຊ້ ເປັນກຳລັງທະຫານເສີມ ເພື່ອສູ້ກັບ ພວກປະຕິວັດຕໍ່ຕ້ານສະເປນ ໃນປີ 1896, ໃນຊຸມ ທ້າຍໆປີ ຂອງສະຕະວັດ ກໍໄດ້ປ່ຽນແປງຕົນເອງ

ມາເປັນ ນິກາຍພະເຈົ້າ ນັກບຸນເກີດໃຫມ່ (messiac sect) ໃນຟີລິບປິນ ໂດຍມີສູນກາງຕັ້ງຢູ່ ບ້ານນຶ່ງ ຂອງ ເຂດຄາບາຣວນ ຂະບວນການນີ້ ດຶງດູດຊາວນາຈຳນວນຫລາຍພັນຄົນ ໃຫ້ໄປຕັ້ງຖິ່ນຖານຢູ່ຫັ້ນນຳ ໂດຍ ເອົາເຂົ້າໄປກິນເອງ ແລ້ວມອບເຂົ້າກິນນັ້ນໄວ້ກັບ ສາງລວມຂອງຊຸມຊົນ. ຫົວໜ້ານິກາຍ ຊື່ວ່າ ບານຕະ ຊາຣ໌ (Baltazar) ກັບຜູ້ຮອງຕົ້ນຕໍຂອງເຂົາ ໄດ້ຮັບການບູຊາໃນຖານະເປັນຕຼິນິຕິ, ພະແມ່ມາເຣຽ ຜູ້ບໍລິສຸດ ແລະນັກບຸນຜູ້ເຜີຍແຜ່ ແລະປົກຄອງບ້ານດ້ວຍ ລະບອບເທວາທິປະໄຕ. ເຖິງແມ່ນວ່າຂະບວນການແຝງ ຊ້ອນດ້ວຍແນວຄຶດເສດຖະກິດກໍຕາມ ພວກເຈົ້າທີ່ດິນ ກໍຖືກດ່າປະຈານວ່າເປັນຄົນບາບໜາ ສາໂຫດ ແລະ ກໍໄດ້ເນັ້ນຍ້ຳ ເຖິງເລື່ອງຄຸນນະທຳ ຢູ່ໃນການຈັດຕັ້ງທາງເສດຖະກິດ ຂອງຄອມມູນຫລາຍ ໃນຕອນຕົ້ນ ປາກົດວ່າ ຂະບວນການ ມີລັກສະນະອຽງໄປທາງເລື່ອງສາສະໜາຫລາຍ ໂດຍມອບໃຫ້ຜູ້ສັດທາ ທັງ ຫລາຍ ຟື້ນຟູສັງຄົມຂອງຕົນ ໃຫ້ຄືນມາມີຊີວິດຊີວາ ແລະ ຫລຸດພົ້ນອອກຈາກບາບ ດ້ວຍສັດທາ. ມາເຖິງ ລະຍະສູງສຸດຂອງຂະບວນການ ມີຜູ້ຄົນປະມານ 25,000 ດຳລົງຊີວິດ ຢູ່ ຄາບາຣວນ ແຕ່ໃນປີ 1901 ພວກ ອາເມລິກາ ໄດ້ຈັບກຸມພວກຫົວໜ້າ ໂດຍມີຂໍ້ຕູ່ຫາວ່າ ເປັນໂຈນ ແລະອາຊະຍາກອນ ແລ້ວຊຸມຊົນນັ້ນ ກໍໄດ້ ສະຫລາຍຕົວໄປ ເພື່ອມາປາກົດຕົວໃນຮູບແບບໃຫມ່ ສາມສິບປີຕໍ່ມາ ໃນເມືອງ ທາຍຸກ ທາງຈາກບ່ອນ ກໍ່ຂະບົດ ໂຄໂລຣອມ ປະມານຊາວໄມລ໌.

ພວກ ເກົ່າດາຍ ເຊິ່ງຕັ້ງໜັ້ນຢູ່ໃນຫວຽດນາມ ເມື່ອຊຸມປີ 1920 ອາດຈະເປັນຂະບວນການ ທີ່ເປັນຂອງຊາວນາ ໜ້ອຍກວ່າແຫ່ງອື່ນໆ ທີ່ເວົ້າເຖິງວ່າ ໄດ້ມີຊາວນາເຂົ້າຮ່ວມຢູ່ໃນຂະບວນ ຢ່າງຫລວງ ຫລາຍກໍຕາມ. ບົນເສັ້ນຊາຍແດນ ລະຫວ່າງການປະຕິຮູບທາງສາສະໜາ ກັບຂະບວນການຜູ້ຮັກຊາດ ເພື່ອໃຫ້ທັນສະໄໝກວ່າ ຕາເວັນຕົກ, ເກົ່າດາຍ ໄດ້ພະຍາຍາມສະເໜີໃຫ້ສະມາຊິກຮັບເອົາ ຜົນສັງເຄາະ ອັນສົມບູບແບບຂອງຫລາຍໆ ສາສະໜາສຳຄັນຂອງໂລກ ເຂົ້າກັນ ເຊັ່ນ ພຸດ ເຕົ໋າ ຂົງຈື້ ອິສະລາມ ແລະ ຄຣິສຕຽນ. ແລ້ວອີກດ້ານນຶ່ງ ກໍ ຟື້ນຟູ ຄ່ານິຍົມດັ້ງເດີມ ຂອງອາລະຍະທຳຫວຽດນາມ. ທ່ານ ໂງວັນຈີ (Ngo Van Chieu) ຂ້າລາຊະການໄວກາງຄົນ ຜູ້ນຶ່ງ ຂອງລັດຖະບານອານານິຄົມ ໂກແຊງຊິນ ເປັນຜູ້ກໍ່ຕັ້ງຜູ້ສຳຄັນ ເຖິງແມ່ນວ່າຜົນທີ່ໄດ້ຮັບ ແມ່ນການເຕົ້າໂຮມກັນກັບລະບົບອື່ນໆ ນອກຈາກລະບົບ ຂອງຕົນເອງ. ເພິ່ນໄດ້ດຶງດູດເອົາຊາວນາເຂົ້າມາຮ່ວມໄດ້ເປັນຫລາຍໜຶ່ນແສນຄົນ ທັງຄົນໃນເມືອງ ແລ້ວ ສະເໜີໃຫ້ເລີ່ມຕົ້ນຈາກຄ່ານິຍົມ ຕາມປະເພນີ ຢູ່ບໍລິບົດຂອງຄວາມຕ້ອງການຕົວຈິງ ເພື່ອທັບມ້າງສູ້ຢັນ ກັບອິດທິພົນຕາເວັນຕົກ ຕາມຮູບແບບທີ່ພວກຕາເວັນຕົກ ນຳໃຊ້ມາແລ້ວ. ພວກຫົວໜ້າຂອງ ເກົ່າດາຍ ຫລາຍຄົນ ເຊິ່ງເດີນຕາມແນວທາງຮັກສາຮີດເດີມ ເພື່ອຕ່ຕ້ານລະບອບອານານິຄົມເຊິ່ງ ຕໍ່ມາພາຍຫລັງ ກາຍເປັນນັກຊາດນິຍົມລາຊາທິປະໄຕ ກໍຍັງໄດ້ຮັກສາພັນທະພາບກັບຊາວນາຈຳນວນຫລວງຫລາຍ ໄວ້ຢູ່.

ແຕ່ຖ້າຫາກວ່າ ເປັນຂະບວນການຂອງຊາວນາ ຫລື ອີງໃສ່ ຊາວນາເປັນພື້ນຖານ,ໃນລະຍະຍາວ ຂະບວນການຮູບແບບຕ່າງໆເຫລົ່ານີ້ ແມ່ນເຮັດໄປເພື່ອ - ຖ້າບໍ່ແມ່ນເພື່ອຫາສາເຫດຮ່ວມກັນ -ຄືການລຸກຮືຂອງພວກຊາດນິຍົມໃນພາກພື້ນ, ສ່ວນໃຫຍ່ແລ້ວ ແມ່ນເກີດຂຶ້ນໃນຕົວເມືອງໃຫມ່ເຊິ່ງອົງການຈັດຕັ້ງທາງ ການເມືອງ ພ້ອມດ້ວຍໂຄງການຕ່າງໆ ລ້ວນແຕ່ເນັ້ງແໜ ໃສ່ຄວາມເປັນເອກະລາດຂອງຊາດ ແລະຢູ່ໃນການ ຊັບຊ້ອນຜູ້ປົກຄອງຄົນທ້ອງຖິ່ນ ແທນບ່ອນຄົນຕ່າງດ້າວນັ້ນ ກໍມີກົກເຄົ້າຂອງມັນ ແລະຄວາມເປັນໄປຂອງ ມັນ ດັ່ງທີ່ພວກເຮົາເຫັນມາແລ້ວ. ຊົນຊັ້ນນຳຕາມຮີດຄອງຫລາຍຄົນ ແຫ່ງສັງຄົມອາຊີຕາເວັນອອກສຽງ ໃຕ້ ຖືກຍູ້ດັນອອກໄປຢູ່ຂ້າງໆ ພາຍໃຕ້ຜົນກະທົບ ຂອງການປົກຄອງອັນຂຸ້ນຂ້ຽວ ຂອງຕາເວັນຕົກ ເມື່ອ ສະຕະວັດທີສິບເກົ້າ ແລະຫລັງຈາກນັ້ນ ກໍຈົ່ງປ່ອງໂກນ ເຊິ່ງບັດນີ້ ຈຳເປັນຕ້ອງໄດ້ທັບຖົມໃຫ້ເຕັມ ດ້ວຍອົງ ປະກອບ ທີ່ເປັນເຊື້ອສາຍຂອງຊົນຊັ້ນນຳເກົ່າ ຫລືບໍ່ ກໍດ້ວຍຊົນຊັ້ນປັນຍາຊົນໃນເມືອງ ເຊິ່ງພວກນີ້ ທັງຈຸດ ໝາຍ ແລະຄວາມຄຶດ ຍັງຕິດແສດຮູບແບບຂອງພວກຕາເວັນຕົກຢູ່ຫລາຍ. ຊົນຊັ້ນນຳໃຫມ່ ຈາກໃນເມືອງ ບໍ່ພຽງແຕ່ຕົກຢູ່ພາຍໃຕ້ອິດທິພົນ ຂອງປາກົດການຫັນປ່ຽນເປັນຕົວເມືອງ ແລະການສຶກສາແບບຕາເວັນ ຕົກເທົ່ານັ້ນ ແຕ່ຍັງຍ້ອນການມີຕົວຕົນຂອງ ພວກພໍ່ຄ້າຕ່າງຊາດ ທີ່ມີອຳນາດຢູ່ຂັ້ນຊຸມຊົນ ໂດຍສະເພາະ ພໍ່ຄ້າຈີນ ເຊິ່ງມີຢູ່ທົ່ວໄປ ໃນສັງຄົມອາຊີຕາເວັນອອກ ແລະດ້ວຍການມີຕົວຕົນຢູ່ທົ່ວໄປ ແມ່ນແຕ່ກາງອາ

ภาด ແນວຄວາມຄຶດໃຫມ່ໆບາງອັນ ກໍມີກົກເຄົ້າຂອງຕ່າງດ້າວ ບາງອັນກໍບໍ່ແມ່ນປານໃດ ເຊິ່ງ ທັງຫມົດນີ້ ໄດ້ເປັນຜູ້ກຳນົດຮູບແບບບາງອັນ ເຊິ່ງຂະບວນການຊາດນິຍົມຍອມຮັບເອົາ.

ລັກສະນະຍັ່ງຍືນອັນນຶ່ງ ຢູ່ໃນປະຫວັດສາດ ແລະສັງຄົມຂອງລັດໃນອາຊີຕາເວັນອອກສຽງໃຕ້ ກໍ ແມ່ນການທຸລະກິດສ່ວນຫລາຍ ກັບການດຳເນີນດ້ານການຄ້າ ຕົກຢູ່ໃນກຳມືຄົນຕ່າງຊາດ ໂດຍສະເພາະ ຊາວຈີນ. ຊຸມຊົນຄົນຈີນກຸ່ມທຳອິດໃນພາກພື້ນນີ້ - ນອກຈາກອານານິຄົມ ທີ່ຕັ້ງຢູ່ຕາມແຄມຝັ່ງແມ່ນ້ຳ ສອງສາມບ່ອນ ທີ່ຫ່າງໄກ ໃນດອນ ບໍນຽວ ແລະ ສຸມາຕຣາກ້ຳໃຕ້ - ສ່ວນຫລາຍຈະເປັນບ່ອນຕັ້ງຊຸມຊົນ ຂະໜາດນ້ອຍ ທີ່ເອີ້ນວ່າ ເຄຕໂຕ (ghettos ຕາມທີ່ນັກຂຽນຄົນນຶ່ງຂຽນໄວ້) ຢູ່ພາຍນອກ ເຂດເມືອງທ່າ ເຮືອ ຫລື ເມືອງຫລວງ ຢູ່ສ່ວນໃນທີ່ມີກຳແພງອ້ອມຮອບ. ຈາກທ່າດີກວ່າອັນນີ້ ພໍ່ຄ້າຊາວຈີນ ທຳການຄ້າ ຂາຍທຸກຢ່າງ ທັງພາຍໃນ ແລະພາຍນອກປະເທດ ໂດຍຍອມປະຕິບັດ ຕາມກົດເກນ ຂອງລາຊະສຳນັກ ຫລື ຂອງພະນັກງານທ່າເຮືອ ຫລື ຂອງຂຸນນາງທ້ອງຖິ່ນ. ມີ ຫລາຍຊຸມຊົນ ເຊິ່ງບາງເທື່ອກໍມີການປ່ຽນ ແປງຂະໜາດນ້ອຍໃຫຍ່ ໄປຕາມລະດູການ ບ່ອນໃດທີ່ອ່າວໃຫຍ່ ແລະຕັ້ງຢູ່ຖ້າວອນແລ້ວ ມັກຈະມີລັດຖະ ບານປົກຄອງຂອງຕົນເອງ ໃນຮູບການໃດນຶ່ງ ໂດຍພໍ່ຄ້າຊັ້ນນຳ ຢູ່ກັບທີ່ (ຮູ້ກັນດີ ໃນພາສາມາເລ ວ່າ ກາປີຕັງ ຈາຍນາ (kapitan china) ເປັນຜູ້ຈັດລະບຽບການ ກັບຊາວຈີນ ແລະເປັນຜູ້ຕອບຄຳຖາມ ຜູ້ປົກຄອງທ້ອງຖິ່ນ ແທນຄົນຈີນທັງຫົມດ. ເຖິງແມ່ນວ່າ ໄດ້ມີການ ຂະຫຍາຍຄວາມສຳພັນ ທາງການຄ້າ ຂອງຈີນ ກັບອາຊີຕາເວັນອອກສຽງໃຕ້ ຫລັງຈາກທີ່ມະຫາອຳນາດເອີຣົບ ໄດ້ເຂົ້າສູ່ເວທີການຄ້າທາງທະເລ ແລ້ວກໍຕາມ ການປ່ຽນແປງອັນສຳຄັນ ກໍບໍ່ເກີດຂຶ້ນ ຈົນເຖິງເວລາຍ່ວງເຂົ້າສູ່ຍຸກອານານິຄົມຂຶ້ນສູງ ໃນສະ ຕະວັດທີສິບເກົ້າ ແລ້ວເພື່ອຕອບສະໜອງຕໍ່ການຄຸ້ມຄອງທີ່ພໍຈະຫາໄດ້ ແລະຕໍ່ໂອກາດທີ່ເກີດຂຶ້ນ ເພາະ ການເຂົ້າຮ່ວມໃນການຂູດຮີດທຳລາຍ ເສດຖະກິດຂາຍສົ່ງ ຕາມເຂດພູດອຍ ປະຊາກອນຈີນສ່ວນໃຫຍ່ ຈຶ່ງ ເຂົ້າໄປຢູ່ໃນຊ່ອງຫວ່າງຂອງສັງຄົມອານານິຄົມ ໂດຍເປັນພໍ່ຄ້າຮັບເໝົາ ພໍ່ຄ້າຂາຍຍ່ອຍ ເປັນຄົນຮັບໃຊ້ ຢູ່ຕາມບ້ານເຮືອນ ແລະເປັນແຮງງານໄຮ້ສີມື.

ພວກຄົນຈີນອົບພະຍົບ ທີ່ເຂົ້າມາສູ່ພາກພື້ນ ໃນຍຸກຕັ້ງຖິ່ນຖານຕາມບໍລິເວນທ່າເຮືອ ມັກແຕ່ງ ດອງກັບແມ່ຍິງຊາວບ້ານ. ໃນບາງສັງຄົມ ເຊັ່ນຕົວຢ່າງວ່າຢູ່ ສະຫຍາມ ພວກລູກຫລານຄົນຈີນ ກໍໄດ້ຊື່ວ່າ ເປັນຄົນພື້ນເມືອງ ເທົ່າໆກັບເປັນຄົນຈີນ. ຢູ່ບ່ອນອື່ນ ດັ່ງພວກລູກຊອດ ແມສຕິໂອສ ຢູ່ ຟິລິບປິນ, ພວກຈີນ ບາບາ ຢູ່ ມາລະກາ ເປຣານາກັງ ຫລື ພວກຕ່າງດ້າວ ທີ່ເກີດໃນທ້ອງຖິ່ນ ຂອງຊະວາ, ສັງຄົມ ສັບປົນ ລູກຊອດເຫລົ່ານີ້ ຕ່າງກໍມີເອກະລັກອັນແຕກຕ່າງກັນ ເຖິງແມ່ນວ່າ ພວກເຂົາຈະປັບປ່ຽນຕົນເອງທາງວັດ ທະນະທຳ ໃຫ້ເຂົ້າກັບສັງຄົມພື້ນເມືອງ ແລະໄດ້ຮັບການຍອມຮັບວ່າ ເປັນສ່ວນນຶ່ງຂອງສັງຄົມນັ້ນແລ້ວ. ແຕ່ ເມື່ອມີຊາວຈີນອົບພະຍົບ ທີ່ເຂົ້າມາຫລາຍຂຶ້ນ ໃນສະຕະວັດທີສິບເກົ້າ ທຸກສິ່ງທຸກຢ່າງ ກໍໄດ້ປ່ຽນໄປ. ຊຸມຊົນ ຊາວຈີນ ຂະໜາດໃຫຍ່ ໂດຍສະເພາະຊຸມຊົນຜູ້ຊາຍລ້ວນ ໄດ້ປາກົດຕົວຂຶ້ນ ມີລັກສະນະເປັນກັນຊົນ ແລະ ບໍ່ສາມາດກືນເຂົ້າຢູ່ໃນສັງຄົມທ້ອງຖິ່ນໄດ້. ໂດຍທີ່ສະຖານະພາບພາຍນອກ ແລະທາງເສດຖະກິດ ໄດ້ຮັບ ການປັບປຸງດີຂຶ້ນເມື່ອຕົ້ນສະຕະວັດ ທີຊາວ ພວກແມ່ຍິງ ຖືກນຳເຂົ້າມາແຕ່ຈີນ ເພື່ອມາຢູ່ກັບພວກຜູ້ຊາຍ ອັດຕາສ່ວນລະຫວ່າງເພດຊາຍຍິງ ເລີ່ມຄົງທີ່ ແລະຜົນທີ່ໄດ້ຮັບ ກໍຄື ສັງຄົມຊາວຈີນ ໄດ້ກາຍເປັນສັງຄົມ ຈີນ ທັງທາງດ້ານຊີວະສາດ ແລະວັດທະນະທຳ ອັນເປັນຄວາມແຕກຕ່າງ ກັບຊຸມຊົນໃກ້ຄຽງ (ທັງມີຈຳ ນວນຫລາຍກວ່າ) ຫລາຍກວ່າທີ່ພວກເຂົາເຄີຍເປັນ. ໃນບາງສ່ວນຂອງອາຊີຕາເວັນອອກສຽງໃຕ້ ມີຄົນຈີນ ອົບພະຍົບເຂົ້າມາຫລາຍກວ່າສ່ວນອື່ນໆ. ແນ່ນອນວ່າ ຕົວຢ່າງອັນໂດດເດັ່ນນຶ່ງ ແມ່ນກໍລະນີ ກົ່ວດອນ ມະລາຢາ ໃນປີ 1850 ມີປະຊາຊົນທັງຫມົດປະມານ 500.000 ຄົນ ສ່ວນໃຫຍ່ ເປັນຊາວມາເລ ໃນລະຫວ່າງ ຕົ້ນສະຕະວັດທີ 19 ຫາລະຍະເກີດສົງຄາມໂລກຄັ້ງທີສອງ ມີຄົນຈີນອົບພະຍົບເຂົ້າມາ ບໍ່ຕ່ຳກວ່າ 19 ລ້ານ ຄົນ ສ່ວນຫລາຍ ມາຢູ່ຊົ່ວຄາວ ແຕ່ຈຳນວນຜູ້ທີ່ຕົກຄ້າງຢູ່ ໃນປີ 1939 ນັບໄດ້ຮອດ 39 % ຂອງຜົນລະ ເມືອງທັງຫມົດ. ຢູ່ລັດຕາມຊາຍຝັ່ງກ້ຳຕາເວັນຕົກ ບ່ອນທີ່ມີຄົນຈີນຢູ່ຫນາແໜ້ນນັ້ນ ມີຄົນຈີນຫລາຍກວ່າ ຄົນມາເລ ຈົນເກີນຈຳນວນປະຊາກອນຊາວມາເລຫລາຍ. ໃນເຂດຂອງ ເນເທີແລນອິນດີສ ມີຄົນຈີນອາໄສຢູ່

ຫນ້ອຍກວ່າ ຄື ຕ່ຳກວ່າ 3 % ຂອງພົນລະເມືອງທັງຫມົດ ໃນປີ 1931. ໃນທັງສອງເຂດນີ້ ຍ້ອນ ການນັບຖືສາສະຫນາ ແລະຄວາມແຕກຕ່າງດ້ານວັດທະນະທຳ ອັນສຳຄັນອື່ນໆ ຊາວຈີນ ຍັງຄົງແຕກຕ່າງຈາກປະຊົນພື້ນເມືອງຢ່າງຈະແຈ້ງ ແລະນີ້ ກໍສາມາດເບິ່ງໄດ້ງ່າຍໆ. ໃນລັດເທິງແຜ່ນດິນໃຫຍ່ຫລາຍແຫ່ງ ບ່ອນທີ່ ການປະສົມປະສານທາງວັດທະນະທຳ ເປັນໄປຢ່າງໄວວາ ໃນອະດີດ ດັ່ງ ຢູ່ ສະຫຍາມ ໃນສະຕະວັດ ທີຊາວ ນັ້ນ ກໍໄດ້ເກີດມີປະຕິກິລິຍາຕໍ່ຕ້ານຈີນ ຢ່າງຮຸນແຮງ ຈຶ່ງເປັນເລື່ອງຍາກ ທີ່ຈະຈຳແນກໄດ້ວ່າ ແມ່ນໃຜເປັນຄົນຈີນ ແລະໃຜບໍ່ເປັນ. ໃນປີ 1932 ຈາກຈຳນວນພົນລະເມືອງ ໃນສະຫຍາມທັງຫມົດ ຄະເນວ່າ ຢ່າງຕ່ຳ ມີຄົນເຊື້ອຊາດຈີນ ຢູ່ 12,2 %, ໃນອິນດູຈີນຝຣັ່ງ ຄະເນວ່າ ມີ 1,6 % ແລະ ຢູ່ໃນພະມ້າ ກໍເທົ່າໆກັນ.

ແຕ່ທັງຈຳນວນ ແລະອັດຕາສ່ວນຂອງປະຊາກອນ ບໍ່ໄດ້ມີຄວາມສຳຄັນ ເທົ່າກັບບົດບາດທາງເສດຖະກິດ (ອາດຈະຍົກເວັ້ນ ໃນກໍລະນີ ຢູ່ ມະລາຢາ ບ່ອນເກີດການປະຕິວັດ ທາງປະຊາກອນ). ທຸລະກິດຂອງຊາວຈີນ ເປັນຮອງກໍແຕ່ ລັດວິສາຫະກິດ ຂະຫນາດໃຫຍ່ ຂອງຊາວເອີຣົບ ເທົ່ານັ້ນ, ນອກນັ້ນ ພໍ່ຄ້າຈີນ ຍູທ່າງຄອບຄອງຢ່າງຂາດຂັ້ນທຸກຢ່າງ ໂດຍສືບທອດເອົາທຸລະກິດ ການຄ້າ ຂອງບັນພະບຸລຸດໄວ້ ນັບແຕ່ ໂຮງສີເຂົ້າ ລົງມາຫາການຕະຫລາດ (ມີການຄາດຄະເນວ່າ ໃນຊຸມປີ 1930 ນັ້ນ ໂຮງສີເຂົ້າຢູ່ສະຫຍາມ ກວ່າ 90 % ເປັນຂອງຊາວຈີນ, ຢູ່ ອິນດູຈີນ ກວ່າ 80 % ແລະ ຢູ່ ຟິລິບປິນ ກວ່າ 75 %), ຕະຫລາດຂາຍສົ່ງ, ແລະຂາຍຍ່ອຍ ທີ່ແຊກຊຶມເຂົ້າໄປ ໂດຍກົງ ຮອດໃຈກາງບ້ານ ຊຸມຊົນໃນຊົນນະບົດ. ຄວາມເຫນືອກວ່າ ອັນຫນ້າງຶດງໍ້ນີ້ ຕັ້ງຢູ່ບົນພື້ນຖານປະສົບການ ທາງການຄ້າແລະຄວາມສຳພັນ ແຫ່ງອະດີດຕະການ, ຄອບຄົວ, ຕາຫນ່າງສາຍຍາດພີ່ນ້ອງ ເຊິ່ງຢູ່ເຫນືອຊາຍແດນປະເທດ ໂດຍອາໄສສະຖາບັນ ເຝິກອົບຮົມແບບຈີນ ໂດຍສະເພາະ (ເຊັ່ນ ສະມາຄົມ ຜູ້ຢືມ) ກັບ ຄວາມຖຫມັ່ນ ທ້າວທັນ ແລະປະຢັດ. ໃນຫລາຍໆກໍລະນີ ກໍຍັງ ເປັນການຄ້າທີ່ - ການປະສົມປະສານ ແບບບໍ່ມີຫຍັງທຽມທັນໄດ້ ແລະແຕກຕ່າງຢ່າງຈະແຈ້ງ ກັບກິດຈະກຳທຸລະກິດ ຫລື ການຄ້າຂາຍ ຢູ່ອາຊີຕາເວັນອອກສຽງໃຕ້ ແບບພື້ນເມືອງ ແລະທັງກີດກັນຢ່າງຮອບດ້ານ ບໍ່ໃຫ້ຊົນຊັ້ນເສດຖະກິດຂັ້ນກາງ ເຕີບໃຫຍ່ຂຶ້ນ ບົນພື້ນຖານຂອງກິດຈະກຳເຫລົ່ານີ້ ໄດ້ຢ່າງເດັດຂາດ. ເວລານັ້ນ ຄວາມສົນໃຈ ຖືກດຶງໄປສູ່ເສັ້ນທາງທີ່ ໃນນັ້ນ "ຊົນຊັ້ນກາງ" ຫລື ຊົນຊັ້ນຂຸນນາງໃຫມ່ - ຢູ່ໃນສັງຄົມສ່ວນໃຫຍ່ຂອງອາຊີຕາເວັນອອກສຽງໃຕ້ ລ້ວນແຕ່ປະກອບດ້ວຍ ພວກອາດຍາສິດ ແລະພະນັກງານລັດຖະບານ.

ຊາວຈີນສ່ວນໃຫຍ່ ດຳລົງຊີວິດຢູ່ໃນຕົວເມືອງ. ສັງຄົມທັງຫລາຍໃນເມືອງ ຢູ່ອາຊີຕາເວັນອອກສຽງໃຕ້ ຈຶ່ງແມ່ນສັງຄົມແບບຈີນ. ດັ່ງນັ້ນ ຈຶ່ງກາຍເປັນ ເອກະລັກຢ່າງນຶ່ງ ຂອງຕົວເມືອງທັງຫລາຍໄປແລ້ວ ທີ່ກິດຈະກຳທາງວັດທະນະທຳ ແລະການເມືອງແບບສະໄຫມໃຫມ່ຂອງຈີນ ໄດ້ສະແດງຕົວອອກຢ່າງມີຊີວິດຊີວາກວ່າຫມູ່ຫມົດ. ຕະຫລອດສາມທົດສະວັດ ທຳອິດຂອງສະຕະວັດທີຊາວ ລັດທິຊາດນິຍົມຈີນ ເທິງ ແຜ່ນດິນໃຫຍ - ແລະການໂຄສະນາທາງການເມືອງ ອັນຈິງຈັງ ລະຫວ່າງ ກຸ່ມ ກົກມິນຕັງ ກັບ ພັກຄອມມູຍ ນິດຈີນ ກໍ່ໃຫ້ເກີດການຕອບສະຫນອງຢ່າງຮຸນແຮງ ໃນຊຸມຊົນຈີນ ໃນແຄມດິນຝາກທະເລ. ຊຸນ ຍັດເຊນ ຜູ້ເຄີຍມາຢ້ຽມຢາກພາກພື້ນນີ້ຫລາຍເທື່ອ ໄດ້ຮັບການສະຫນັບສະຫນຸນທາງການເງິນ ຈາກນາຍທຶນຈີນ ຝາກທະເລ ຢ່າງມາກມາຍ, ການປະຕິວັດຢູ່ຈີນປີ 1911 ກໍມີຜົນພວງມາຮອດຄົນຈີນ ຢູ່ ສິງກະໂປ ບາງກອກ ມະນີລາ ແລະແຫ່ງ ອື່ນໆ ອີກ - ມີຄວາມຟົດຟື້ນ ອັນເຕີບໃຫຍ່ຂຶ້ນເລື້ອຍໆ ຕໍ່ການສຶກສາແບບໃຫມ່ (ດ້ວຍການແຕ່ງຕັ້ງເອົາຄູ ທີ່ມາຈາກຈີນ) ດ້ວຍການຈັດຕັ້ງສະໂມສອນສຶກສາ ແລະອ່ານບົດຄວາມ ເຊິ່ງກວມກຸ້ມດ້ວຍການເມືອງ ແລະດ້ວຍຍຸກເບັ່ງບານ ຂອງສຳນັກຂ່າວທີ່ມີຊື່ສຽງ. ກິດຈະການແບບນີ້ ໄດ້ຮັບການສະຫນັບສະຫນຸນ ດ້ວຍການໂຄສະນາຊວນເຊື່ອ ທາງການເມືອງ ຂອງ ພວກ ກົກມິນຕັງ ແລະພັກຄອມມູຍນິດຈີນ ທີ່ແຕກແຍກກັນ ໃນປີ 1927 ແລະໄດ້ສົ່ງເສີມ ຮັກສາຄວາມກົມກຽວພາຍໃນ ລະຫວ່າງຄົນຈີນ ແລະຄວາມຮູ້ກ່ຽວກັບການແຕກຕ່າງ ແລະຊ່ອຍໃນການຖ່ວງດຶງການກືນລຶດໃນອະນາຄົດ ໂດຍສັງຄົມ ເຈົ້າຂອງຖິ່ນ - ຂັ້ນຕອນ ນຶ່ງ ທີ່ໄດ້ຮັບການຊ່ອຍເຫລືອ ໃນທາງກັບກັນ ກໍມີຂໍ້ສົງໄສ ແລະບາງຄັ້ງ ກໍມີຄວາມເປັນປໍລະປັກຂອງອີກຝ່າຍນຶ່ງ. ຍິ່ງໄປກວ່ານີ້, ຄວາມສຳເລັດ ໃນທາງວັດຖຸ ຂອງຊາວຈີນ

ຟາກທະເລ, ຄວາມສາມາດຂອງພວກເຂົາ ໃນການຈັດຕັ້ງ, ໃຫ້ການສຶກສາ ແລະອີກຢ່າງນຶ່ງ ເພື່ອໃຫ້ສາ ມາດປັບປຸງຕົນເອງ; ລັດທິຊາດນິຍົມ ແບບຮຸນແຮງ ກັບລັດທິຕໍ່ຕ້ານຈັກກະພັດນິຍົມ ຂອງ ຫນ່ວຍການ ເມືອງໃນຈີນແຜ່ນດິນໃຫຍ່ ດັງສະທ້ອນອອກ ຢູ່ໃນອາຊີຕາເວັນອອກສຽງໃຕ້ ໃນນາມວ່າ ເປັນຜູ້ໂກດແຄ້ນ ຜູ້ກະຕຸ້ນ ແລະບາງຄັ້ງ ເປັນແບບຢ່າງ ໂດຍການສະຫນອງສ່ວນສຳຄັນນຶ່ງຂອງສິ່ງແວດລ້ອມ ເຊິ່ງໃນນັ້ນ ລັດທິຊາດນິຍົມ ຂອງອາຊີຕາເວັນອອກສຽງໃຕ້ ກໍ່ຕົວເຕີບໃຫຍ່ຂຶ້ນ.

ລັດທິຊາດນິຍົມຈີນ ກັບ ປາກົດການທີ່ກ່ຽວຂ້ອງ ໄດ້ສ້າງແຕ່ງຄວາມຄຶດແນວນຶ່ງດຽວ ຖ້າມກາງ ຄວາມນຶກຄຶດຮ້ອຍອັນພັນແນວ ໃນຈັກກະວານ ແນວຄຶດນີ້ ຕີຫນ່ຳຕຳຕ້ອງໃສ່ໂລກຂອງປັນຍາຊົນ ແຫ່ງອາ ຊີຕາເວັນອອກສຽງໃຕ້ ໃນພາກຕົ້ນຂອງສະຕະວັດທີຊາວ. ຄວາມສຳເລັດຂອງປະເທດຍີ່ປຸ່ນ ໃນການຫລີກ ເວັ້ນລັດທິໂຫ່ເມືອງຂຶ້ນ ແລະໄດ້ກາຍເປັນມະຫາອຳນາດດ້ານອຸດສາຫະກຳ ປະເທດທຳອິດໃນອາຊີ, ເປັນ ຄວາມບັນລຸຜົນທີ່ຈ້ຳກາ ຮັບປະກັນດ້ວຍໄຊຊະນະ ເຫນືອພະເຈົ້າຊາຣ໌ ແຫ່ງຣັດເຊຽ ໃນປີ 1905 ນັ້ນ ໄດ້ຮັບ ຄວາມນິຍົມຊົມຊື່ນ ແລະຕໍ່ມາກໍໄດ້ກາຍເປັນແບບຢ່າງ ແຫ່ງການເສັງຊ່ວງກັນ. ການປັ້ນປ່ຽນ ໃນແນວ ຄວາມຄຶດທີ່ຕິດຕາມສົງຄາມໂລກ ຄັ້ງທີ 1 ຢູ່ເອີຣົບ ນັ້ນ ໄດ້ສົ່ງຜົນສະທ້ອນຫລາຍຢ່າງຕໍ່ ອາຊີຕາເວັນອອກ ສຽງໃຕ້. ການແຜ່ຂະຫຍາຍຂອງລັດທິສັງຄົມນິຍົມ ແລະຄອມມູຍນິດ ເຖິງວ່າຍັງຍາກທີ່ຈະຕີລາຄາລວມ ແລະກໍຍັງບໍ່ທັນມີການສຶກສາຢ່າງພຽງພໍ ໄດ້ຖືກຳເນີດມາແຕ່ຍຸກນັ້ນແລ້ວ. ລັດທິຊ້າຍຈັດຂວາໂພດ ຂອງ ຕາເວັນຕົກ ໄດ້ຮັບການໂຄສະນາເຜີຍແຜ່ ທັງໂດຍກິດຈະກຳຕ່າງຂອງ ນັກສັງຄົມນິຍົມເອີຣົບ ຢູ່ໃນ ອົງເຂດ (ເຊັ່ນ ເຮັນ ດຣິຄັສ ຊນີຟລຽຕ ແລະ ອາດອລຟ໌ ບາອາຣ໌ ຢູ່ ຊະວາ ທີ່ເຂົ້າຮ່ວມໃນລັດທິສະຫະພັນການ ຄ້ານິຍົມ) (Trade-Unionism) ແລະໂດຍ ການເຄື່ອນໄຫວເດີນທາງລະຫວ່າງຊາດ ຂອງ ພວກຜູ້ນຳ ເຊັ່ນ ພວກກົກມິນຕັນ ຄື ຕັນ ມາລາກາ ແລະ ໂຮຈິມິນ ເປັນຕົ້ນ. ແຕ່ອິດທິພົນຂອງແນວຄວາມຄຶດແບບ ມາກຊ໌ ເລນິນ ກ່ຽວກັບລັດທິອານານິຄົມ ແລະທິດສະດີ ທຶນການເງິນ ແລະມູນຄ່າສ່ວນເກີນ ໄດ້ກ້າວໄປໄກກວ່າ ຜູ້ທີ່ເປັນຕົ້ນຄວາມຄຶດຊ້ຳອີກ ມັນໄດ້ກາຍເປັນສຽງນຶ່ງ ອິດທິພົນນຶ່ງ ຢູ່ໃນການນຶກຄຶດຂອງຜູ້ໄດ້ຮັບການ ສຶກສາ ແລະຜູ້ທີ່ຮ່ຳຮຽນໂດຍຕົນເອງຈຳນວນຫລາຍຄົນ ໃນອາຊີຕາເວັນອອກສຽງໃຕ້. ສາມາດເວົ້າແນວ ນີ້ໄດ້ອີກ ກັບແນວຄວາມຄຶດກ່ຽວກັບຄຳສອນກ້າວຫນ້າເທື່ອລະຂັ້ນ ຂອງຜູ້ພິທັກ ແລະຜູ້ຮັບມອບສິດ ເຊິ່ງຢູ່ ພາຍໃຕ້ຮົ່ມເງົາ ຂອງສັນນິບາດແຫ່ງຊາດ (The League of Nations) ໄດ້ສະເຫນີເຫດຜົນແບບໃຫມ ແລະຄວາມຈູງໃຈເບື້ອງຫລັງອັນໃຫມ ສຳລັບພຶດຕິກຳ ຂອງພວກກຳອຳນາດ ອານານິຄົມ. ລັດທິຊາດ ນິຍົມອິນເດຽ ອີງໃສ່ແນວຄວາມຄຶດ ຊວາຣາຊ (ປົກຄອງຕົນເອງ) ແລະການຕໍ່ຕ້ານ ໂດຍອະຫິງສາ ແບບ ຄານທີ ນັ້ນ ເຖິງວ່າ ບໍ່ໄດ້ສະທ້ອນອອກຢູ່ໃນອາຊີຕາເວັນອອກສຽງໃຕ້ ໂດຍກົງ ຍົກເວັ້ນໃນຊຸມຊົນອິນເດຽ ເອງ ຢູ່ພະມ້າ ແລະ ມາເລ ກໍຕາມ ກໍຍັງໄດ້ມີສ່ວນປະກອບ ໃນການຕື່ມສີສັນໃຫ້ແກ່ຄວາມນຶກຄຶດ ອັນສັບ ປົນ ທີ່ເປັນເອກະລັກແຫ່ງຍຸກນັ້ນ.

ຈຸດສຸມຂອງແນວຄວາມຄຶດໃຫມ່ ແມ່ນ ຕົວເມືອງ, ພາຫະນະ ແມ່ນ ການສຶກສາ ປະເພດຕ່າງໆ ແລະ ຜູ້ໄດ້ຮັບປະໂຫຍດ ກໍແມ່ນຊົນຊັ້ນນຳໃນເມືອງ.

# ບົດທີ 24 ຊ່ອງທາງການຫັນປ່ຽນ

## ການຫັນປ່ຽນ ເປັນຕົວເມືອງ

ຢູ່ໃນພາກພື້ນອາຊີຕາເວັນອອກສຽງໃຕ້ ໃນຍຸກທັນສະໄໝ ຖ້າຫາກຄວາມສັບສົນໃນການສ້າງ ສັນ ຫັນປ່ຽນເປັນເມືອງ ເປັນເລື່ອງໃຫມ່ອ່ຽມແລ້ວ ກະໂຕບັນດາຕົວເມືອງນ້ອຍໃຫຍ່ ຊ້ຳບໍ່ແມ່ນເລື່ອງ ໃຫມ່. ອາຊີຕາເວັນອອກສຽງໃຕ້ ກ່ອນຍຸກອານານິຄົມ ມີຊຸມຊົນເມືອງຢູ່ຫລາຍບ່ອນແລ້ວ ເຊັ່ນ ສັງຄົມ ປົກຄອງ ຕົນເອງ, ສູນກາງເຮັດວຽກຂອງລັດຖະບານ ພະນັກງານ, ບ່ອນດຳເນີນກິດຈະກຳທາງສາສະໜາ ແລະ ປັນຍາຊົນ ກັບບ່ອນເຮັດການຄ້າຂາຍ ເຊິ່ງເປັນທີ່ຢູ່ອາໄສຂອງປະຊາຊົນ ຜູ້ບໍ່ຕິດພັນ ກັບທີ່ດິນ ທີ່ເອີ້ນວ່າ ຄົນໃນເມືອງ ບໍ່ແມ່ນຄົນຊົນນະບົດ. ເມືອງໃຫຍ່ ແລະສຳຄັນທີ່ສຸດ ທັງເປັນທີ່ຮູ້ຈັກກັນດີ ແມ່ນເມືອງຫລວງ ຂອງລັດ ແຕ່ກໍມີເມືອງຂະໜາດນ້ອຍປະຈຳແຂວງຫລາຍຄືກັນ. ໃນບັນດາເມືອງ ໃຫຍ່ໆນັ້ນ ເມືອງຕົວຢ່າງ ດີເດັ່ນເມືອງນຶ່ງ ແມ່ນ ມາລະກາ ເມື່ອສະຕະວັດທີສິບຫ້າ, ເມືອງນີ້ ເປັນເມືອງສູນກາງໃຫຍ່ ແຫ່ງອານາ ຈັກທາງການຄ້າ ຂອງ ມາເລ. ເຮືອນຫລັງຄາມຸງກະເບື້ອງ ຫລື ຫຍ້າ ຂອງປະ ຊາຊົນ ກັບສາງສິນຄ້າ ຢັ່ງຢາຍລຽບໄປຕາມຖະໜົນຂະໜາດກວ້າງ ປູພື້ນແໜ້ນໜາ ໃນເຂດການຄ້າຂອງຕົວເມືອງນັ້ນ ອັ່ງອໍ ໄປດ້ວຍຜູ້ຢູ່ອາໄສ ກັບພໍ່ຄ້າຊາວຂາຍ ຈາກທົ່ວສາລະທິດ, ພວກເຂົາລຽນຢາຍ ຂ້າມຮອງນ້ຳແຄບໆ (ຂັ້ນ ເປັນຫ້ອງຂາຍເຄື່ອງນ້ອຍໆຕິດຕໍ່ກັນ) ຕັ້ງແຕ່ເຂດປ້ອມຍາມທີ່ຄວບຄຸມຢູ່ ແລະນະທີ່ນັ້ນ ແມ່ນທີ່ຕັ້ງ ພະລາ ຊະວັງຂອງ ທ່ານສຸລະຕານ ມາເລ ໂດຍມີຫໍຜາສາດແລະຈຸ້ມອາຄານບໍລິວານ ພ້ອມດ້ວຍເຮືອນຊານ ທີ່ພັກ ເຊົ້າຂອງພວກຂຸນນາງມາເລ ກັບບໍລິວານ.

ອີກຕົວຢ່າງນຶ່ງ ແມ່ນເມືອງບາງກອກ ເຊິ່ງຄ້າຍຄືກັບ ອະຍຸທະຍາ ເມືອງຫລວງເກົ່າ, ມີຜັງ ເມືອງເປັນວົງຊ້ອນກັນ, ຊັ້ນໃນສຸດ ເປັນບ່ອນຕັ້ງພະລາຊະວັງຂອງເຈົ້າຊີວິດ ນອກອອກມາ ເປັນອາຄານ ຂະໜາດໃຫຍ່ ເປັນທີ່ຕັ້ງກະຊວງສຳຄັນໆ ຢູ່ວົງນອກອອກມາອີກ ເປັນບ່ອນຢູ່ສ່ວນນຶ່ງຂອງຄົນໄທ ມີຫໍ ໂຮງຂອງລາຊະບຸດທັງຫລາຍ ພວກຂ້າລາຊະການ ແລະເຮືອນຊານທີ່ຢູ່ ພວກເສນາອາມາດກັບຄອບຄົວ. ຢູ່ນອກສຸດຈຶ່ງແມ່ນຄຸ້ມພໍ່ຄ້າຈີນ ທີ່ລ້ອມໃຈກາງເມືອງໄວ້ ແລະລາມອອກໄປຮອດຊົນນະບົດ.

ເມືອງເໜ້ ໃນສະຕະວັດທີສິບເກົ້າ ເຊິ່ງເປັນກອງບັນຊາການກາງຂອງລາຊະສຳນັກໜ່ວຽນ ກັບພວກຂ້າລາຊະການ ກໍມີລັກສະນະບາງຢ່າງຄ້າຍຄືກັນ. ເຊັ່ນດຽວກັບເມືອງໃຫຍ່ອື່ນໆຂອງຫວຽດນາມ ກ່ອນຍຸກອານານິຄົມ ເປັນເມືອງທີ່ແບ່ງແຍກອອກຈາກກັນແບບບໍ່ສົມສ່ວນ ພາກສ່ວນສຳຄັນ ມີກຳແພງ ທີ່ເອີ້ນວ່າ ຖ້ານ (thanh) ຫ້ອມລ້ອມ, ບ່ອນຕັ້ງຜາສາດລາຊະວັງ ຂອງເຈົ້ານາຍ ຂ້າລາຊະການ ກັບທະ ຫານ. ບ່ອນຕິດໆກັນ ຕໍ່ອອກມາແມ່ນ "ຖີ" (thi) ຫລື ຕະຫລາດ ເຊິ່ງເປັນທີ່ຢູ່ອາໄສຂອງລາສະດອນ ແລະ ເປັນບ່ອນພໍ່ຄ້າຊາວຂາຍ ເອົາເຄື່ອງຂອງມາຂາຍກັນ. ໂດຍຍຶດຖືຕາມຫລັກການຂອງລັດທິຂົງຈື້ ໃນການ ຈັດແບ່ງລຳດັບທາງສັງຄົມ ພວກພໍ່ຄ້າມີຖານະ ຕ່ຳກວ່າພວກນັກປາດອາຈານ ແລະຊາວນາ, ນະຄອນ ເໜ້ ຈຶ່ງແຍກພວກພໍ່ຄ້າຊາວຂາຍ ໃຫ້ອອກໄປຢູ່ເຂດຮອບນອກຂອງໃຈກາງເມືອງ.

ສິ່ງນຶ່ງ ທີ່ກະທົບສາຍຕາກວ່າໝູ່ໝົດ ທີ່ລັດທິອານານິຄົມ ກັບການຄອບຄອງຂອງ ເອີຣົບ ໄດ້ເຮັດໄວ້ ແມ່ນການຫັນປ່ຽນເອົາເມືອງໃຫມ່ ທີ່ສ້າງຂຶ້ນຢູ່ພາຍໃນ ອອກໄປໄວ້ນອກ ດັ່ງນັ້ນ ຢູ່ກາງຫົວໃຈ ຂອງພວກເຂົາ ຈຶ່ງບໍ່ແມ່ນລະບອບລາຊາທິປະໄຕ ແຕ່ແມ່ນ ເງິນ - ດັ່ງນັ້ນ ໃນກາງເມືອງ ຈຶ່ງມີແຕ່ສຳນັກ ງານການເງິນ ຂອງພໍ່ຄ້າຈີນ ແລະນັກການຄ້າອື່ນໆ, ຮ້ານຄ້າທີ່ເຕັມໄປດ້ວຍສິນຄ້າເຄື່ອງໃຊ້ສອຍ ຈາກ ແມນເຊສເຕີ, ມາຣ໌ຊາຍ, ບອມເບ ແລະ ຮ່ອງກົງ. ໃຈກາງເມືອງ ຖືກບັງຄັບໃຫ້ສະຫລະບ່ອນ ແກ່ຕະ ຫລາດ ເມື່ອເງິນຕາ ກາຍເປັນພະເຈົ້າຊີວິດ, ການກອບໂກຍທາງເສດຖະກິດຈຶ່ງເປັນທັງເຫດຜົນ ເພື່ອ

ການເກີດຂຶ້ນຂອງກະໂຕ ຕົວເມືອງເອງ ແລະເປັນຄວາມຈູງໃຈ ສຳລັບຜູ້ຄົນສ່ວນໃຫຍ່ ທີ່ເດີນທາງເຂົ້າ ມາເມືອງ ເຊັ່ນ ຊາວນາ ຫລື ພວກສວຍໂອກາດ. ດ້ວຍວ່າ ເມືອງເກົ່າແກ່ອີກຫລາຍແຫ່ງ ກໍຄ່ອຍໆປ່ຽນ ຮູບໂສມດ້ວຍຂັ້ນຕອນແນວນີ້ ຫລາຍເມືອງກໍເລີຍກາຍເປັນແຕ່ ທາງຜ່ານ ທີ່ຫລ້າຫລັງດ້ານການເມືອງ ແລະຫລຸດຜ່ອນຄວາມສຳຄັນທາງວັດທະນະທຳໄປ ເຊັ່ນ ເມືອງເຫວ້ ກັບລາຊະສຳນັກ ເຊິ່ງສູນເສຽສະຖາ ນະພາບໄປໃນຊຸມປີ 1880 ເມື່ອພວກ ອານານິຄົມເຂົ້າມາຄອບຄອງ ແລະໄດ້ເຮັດໃຫ້ ເສດຖະກິດຂອງເຂດ ໄຊ່ງອນ-ໂຊລອງ ກັບ ຮາໂນຍ ຮາຍຟອງ (Saigon-cholon, Hanoi, Haifong) ຮຸ່ງເຮືອງຂຶ້ນ ເຊັ່ນດຽວ ກັນກັບທີ່ມັນເຮັດໃຫ້ ກວາລາກັນຊາ (Kuala Kangsar) ລາຊະທານີນ້ອຍໆແຫ່ງນຶ່ງໃນ ປີຣັກ (Perak) ເມື່ອຊຸມປີດຽວກັນ ກາຍເປັນພຽງທີ່ຜຳນັກ ຂອງ ສຸລະຕານ ແຕ່ຫາກບໍ່ໄດ້ເປັນສູນກາງບໍລິຫານ ຂອງລັດ ແຫ່ງໃຫມ່ ເຊິ່ງໄປຮຸ່ງພຸ່ງພົ້ນຂຶ້ນຢູ່ທີ່ງບໍ່ແຮ່ຊືນ ຂອງພວກຈີນ ຢູ່ໄຕປິງ (Taiping). ໃນປີ 1872 ປະຊາກອນ ໃນ ຢ່າງກຸ້ງ (Rangoon) ມີບໍ່ຮອດ 99,000 ຄົນ, ຢູ່ເມືອງ ມັນດາເລ (Mandalay) ມີຫລາຍກວ່າສອງ ເທົ່າ. ສາມສິບປີຕໍ່ມາ ຢ່າງກຸ້ງ ມີປະຊາກອນເກືອບສອງແສນຫ້າ ສ່ວນ ມັນດາເລ ບໍ່ພຽງແຕ່ ຢຸດສະງັກ ການເຕີບໃຫຍ່ໄປ ແຕ່ຍັງຫົດຫຍໍ້ສ່ວນລົງອີກ.

ດັ່ງນັ້ນ ຕົວເມືອງໃຫມ່ສ່ວນໃຫຍ່ຈຶ່ງເປັນຈຸດສຸມ ສຳລັບພະລັງງານທາງເສດຖະກິດໃຫມ່ ຫລື ເສດ ຖະກິດ ທີ່ຂະຫຍາຍຕົວແຮງ, ມີກຸ່ມສັງຄົມໃຫມ່ ຫລື ທີ່ພວມຫັນປ່ຽນ. ບາງເມືອງທີ່ຢູ່ຊາຍແດນ ກໍມີອັນ ກຽວຂ້ອງ ກັບການຂຸດຄົ້ນບໍ່ແຮ່ທີ່ພວມເຕີບໃຫຍ່ຢ່າງວ່ອງໄວ. ຕົວຢ່າງຢູ່ ສະຫຍາມ ແລະຢູ່ ມາລາຢູ ກໍ ເຊັ່ນກັນ, ຕົວເມືອງໃຫມ່ຫລາຍແຫ່ງເກີດຂຶ້ນພ້ອມໆກັບການຂຸດຄົ້ນບໍ່ແຮ່ຊືນ. ຕົວຢ່າງນຶ່ງແມ່ນ ພູເກັດ ເຊິ່ງ ອາດຈະແມ່ນ ເມືອງທຳອິດໃນປະເທດ ທີ່ມີຖະຫນົນປູຢາງ ແລະລົດໂອໂຕ ເມື່ອຢ່ວງເຂົ້າ ປີ1910. ເຊັ່ນ ດຽວກັນກັບ ໄຕປິງ ແລະເຊຣຳບັນ ຢູ່ໃນລັດມາເລ, ພູເກັດ ເປັນເມືອງຈີນອ້ອຍຕ້ອຍ ໂດຍມີເສັ້ນທາງຄົມມະ ນາຄົມຕົ້ນຕໍ ແລ່ນມຸ່ງສູ່ ສິງກະໂປ ກັບ ປີນັງ. ຢູ່ທາງພາກເຫນືອຂອງສະຫຍາມ (ປະເທດໄທ) ອຸດສາຫະ ກຳ ຕົ້ນຕໍ ແມ່ນການຕັດໄມ້ສັກ ຕົວເມືອງ ຄື ປາກນ້ຳໂພ ເກີດຂຶ້ນ ເພື່ອເປັນສະຫນາມໄມ້ ແລະຕັ້ງໂຮງ ເລື່ອຍ ໄວ້ເລື່ອຍໄມ້ທ່ອນ. ກວາລາລຳເປ ເຊິ່ງຕັ້ງຕົ້ນຈາກກະຕູບມຸງຫຍ້າ ຂອງຄົນຈີນໃນປີ 1853 ຢູ່ແຄມ ຝັ່ງ ບ່ອນແມ່ນ້ຳກລາງ ກັບ ກົມບັກ ຕົກໃສ່ກັນນີ້ ກໍໄດ້ຖືກສ້າງຂຶ້ນດ້ວຍລາຍຮັບຈາກບໍ່ແຮ່ຊືນ. ມາຮອດປີ 1896 ເມືອງນີ້ ບໍ່ພຽງແຕ່ໄດ້ເປັນເມືອງຫລວງ ຂອງ ເຊລັງກໍ ເທົ່ານັ້ນ ແຕ່ເປັນຂອງຫມົດສະຫະພັນທະລັດ ມາເລ. ເມືອງນີ້ ມີປະຊາກອນຫລາຍກວ່າ 32,000 ຄົນ ເຊິ່ງໃນນັ້ນ 23,000 ຄົນ ເປັນເຊື້ອ ສາຍຈີນ ແລະ ເປັນມາເລ 3,700 ຄົນເທ່ານັ້ນ.

ສ່ວນຫລາຍແລ້ວ ເມືອງເຫລົ່ານີ້ ທຳການຜະຫລິດເພື່ອສົ່ງອອກ ບໍ່ແມ່ນເພື່ອບໍລິໂພກໃນທ້ອງຖິ່ນ. ເພື່ອອຳ ນວຍຄວາມສະດວກໃຫ້ແກ່ການຄ້າ ມີການສ້າງທ່າເຮືອນ້ຳເລິກໃຫຍ່ໆຂຶ້ນມາ ເພື່ອລະບາຍສິນຄ້າ ເຊັ່ນ ຊືນ, ຢາງພາຣາ, ເຂົ້າ ແລະວັດຖຸດິບສຳຄັນອື່ນໆ ເພື່ອຈັດສົ່ງໄປຍັງຕະຫລາດໂລກ. ທ່າເຮືອບາງບ່ອນ ເຊັ່ນ ມະນີລາ ແລະ ບັດຕາເວຽ ເປັນເມືອງເກົ່າທີ່ຖືກປ່ຽນມາເປັນເມືອງທ່າ ເມືອງອື່ນໆ ເຊັ່ນ ຮາຍຟອງ ແລະ ປີນັງ ເປັນເມືອງທີ່ສ້າງຂຶ້ນເມື່ອສະຕະວັດທີສິບເກົ້າ. ແຕ່ຕົວຢ່າງພິເສດສຸດ ອາດແມ່ນ ສິງກະໂປ ທີ່ສ້າງຂຶ້ນເມື່ອ ປີ 1819 ເພື່ອເຂົ້າຮ່ວມການຄ້າຕາມຫມູ່ເກາະດອນໃນຮູບແບບເກົ່າ ໃນລະຍະເວລາຕໍ່ມາ ຂອງສະຕະວັດທີສິບເກົ້າ ສິງກະໂປ ໄດ້ກາຍເປັນຕະຫລາດສົ່ງອອກຂະຫນາດໃຫຍ່ ສຳລັບຜະຫລິດຕະພັນ ຈາກບໍລິເວນໃກ້ຄຽງ ຕະຫລອດຈົນເປັນທ່າເຮືອຂົນປ່ຽນສິນຄ້າແບບເກົ່າ ເມື່ອຈະສ້ຽງສຸດສະຕະວັດທີສິບ ເກົ້າ ສິງກະໂປ ອາດເປັນເມືອງທີ່ມີຜູ້ຄົນເວົ້າຫລາຍພາສາທີ່ສຸດໃນອາຊີ ເພາະວ່າ ປະຊາຊົນຮອດສາມ ສ່ວນສີ່ ໃນ 228,000 ຄົນ ເປັນຊາວຈີນ. ອາດບັນຍາຍໄດ້ອີກແບບນຶ່ງວ່າ ສິງກະໂປ ເປັນເມືອງຂອງຄົນ ຈີນ ທີ່ດຳເນີນການປົກຄອງໂດຍ ອັງກິດ ເພື່ອຜົນປະໂຫຍດຂອງທັງສອງກ້ຳສອງຝ່າຍ. ແຕ່ເມືອງ ນີ້ ກໍຍັງ ເປັນບ່ອນພົບພໍ້ກັນ ລະຫວ່າງຊາວມາເລ 23,000 ຄົນ ຈາກລັດຕ່າງໆ ໃນແຫລມມະລາຢູ ເຊິ່ງໃນນັ້ນ ມີຫລາຍກວ່າ 12,000 ຄົນ ມາຈາກ ຊະວາ, ສຸມາຕຣາ, ບູກິສ, ຟິລິບປິນ, ບາວຽນ ແລະຊາວອາຊີຕາ ເວັນອອກສຽງໃຕ້ອື່ນໆ, ມີທັງຊາວມຸດສະລິມຈຳນວນຫລາຍ ແລະຊາວ ອິນເດຽ ທີ່ບໍ່ເປັນມຸດສະລິມ ຢ່າງ

ຫນ້ອຍ ມີຄົນອາຫຣັບ 1000 ຄົນ. ນີ້ແລ້ວ ຈຶ່ງເປັນຕົວຢ່າງ ຂອງສິ່ງທີ່ເກີດຂຶ້ນແທ້ໆ ໃນເມືອງໃຫມ່ອື່ນໆ ໃນຂົງເຂດອາຊີຕາເວັນອອກສຽງໃຕ້ ບ່ວ່າຈະຢູ່ພາຍໃຕ້ການຄອບຄອງຂອງຊາວຕ່າງດ້າວ ຫລື ບໍ່ກໍຕາມ ມັນແມ່ນການເອົາຜູ້ຄົນຈຳນວນມາກມາຍ ຈາກພື້ນຖານທາງສັງຄົມ ຄົນລະແບບ ແລະມີປະສົບການ ຕ່າງໆນາໆ ມາແລກປ່ຽນ ຮ່ວມຊີວິດກັນ ຫລື ຢ່າງຫນ້ອຍ ກໍມາຢູ່ຢ່າງເປັນກ້ອນເປັນຫນ່ວຍ.

ບັດນີ້ ເມື່ອລຳດັບຊຸ່ປະເພດກິດຈະກຳເສດຖະກິດ ທີ່ກໍ່ໃຫ້ເກີດເມືອງໃຫມ່ ແລ້ວອາດຈະຕ້ອງເວົ້າ ເຖິງການຫັນປ່ຽນ ເປັນປະເທດອຸດສາຫະກຳ ເຊິ່ງເປັນກຳລັງອັນຍິ່ງໃຫຍ່ຢູ່ເບື້ອງຫລັງການຫັນເປັນຕົວ ເມືອງຢູ່ທົ່ວທຸກແຫ່ງ. ເພາະວ່າເສດຖະກິດເກືອບທັງຫມົດຂອງອາຊີຕາເວັນອອກສຽງໃຕ້ ຍຸກອານານິຄົມ ໂດຍຕົ້ນຕໍແລ້ວ-ຖ້າບໍ່ແມ່ນທັງຫມົດ-ແມ່ນເສດຖະກິດການຂຸດຄົ້ນ (ບໍ່ແຮ່), ມີເມືອງໃຫມ່ໆຈຳນວນຫນ້ອຍ ດຽວເທົ່ານັ້ນທີ່ສາມາດ ຖືກເອີ້ນວ່າ ເປັນເມືອງຜະຫລິດເຄື່ອງໂຮງງານ ຫລື ເມືອງອຸດສາຫະກຳ. ເມືອງ ແບບນີ້ ສ່ວນຫລາຍຕັ້ງຢູ່ ຫວຽດນາມ ບ່ອນນະໂຍບາຍດ້ານເສດຖະກິດຂອງຝຣັ່ງ ແຕກຕ່າງກັບນະໂຍ ບາຍເສດຖະກິດຂອງມະຫາອຳນາດອານານິຄົມອື່ນໆ ໃນດ້ານລາຍລະອຽດຍິບຍ່ອຍ. ໂຮງງານຕ່ຳແຜ່ນ ຖືກສ້າງຂຶ້ນຢູ່ ຮາໂນຍ ແລະ ນາມດິນ ໃນຕົ້ນຊຸມປີ 1890 ແລະໂຮງງານຊີມັງ ບ່ອນສຳຄັນຢູ່ ຮາຍຟອງ ກໍມີມາ ແຕ່ປີ 1899 ໂຮງງານສ້າງທາງລົດໄຟ (ດັ່ງດຽວກັນກັບຢູ່ ກວາລາລຳເປີຣ໌ ແລະ ເຊມາຣັງ ໃນ ຊະວາ) ກໍໄດ້ປາກົດຕົວຂຶ້ນ ແລະໂຮງໄຟຟ້າ ກໍເຊັ່ນກັນ (ຄືກັບຢູ່ ມະນີລາ ແລະ ສິງກະໂປ) ສຳລັບຮັບໃຊ້ ການຜະຫລິດນ້ຳແຮ່ ແລະຢາດູດ. ແຕ່ການຫັນປ່ຽນເປັນອຸດສາຫະກຳຢູ່ທົ່ວທຸກບ່ອນກໍຍັງຍ່ອມເຍົາຫລາຍ ແມ່ນແຕ່ຢູ່ໃນຫວຽດນາມ ແຮງງານຈຳນວນຫລາຍໃນຊຸມປີ 1930 ຍັງຢູ່ນອກຕົວເມືອງ ເຊັ່ນຢູ່ເຂດປູກ ຝ້າຍໃຫຍ່ໆຂອງໂກແຊງຊີນ ຫລືບໍ່ຖ່ານຫີນຢູ່ທາງພາກເຫນືອ.

ຫນ້າທີ່ຕົ້ນຕໍຂອງເມືອງໃຫຍ່ ແລະເມືອງນ້ອຍທັງຫລາຍ ແມ່ນການຮັບໃຊ້ຈຸດປະສົງທາງ ການ ຄ້າ ແລະການພານິດຂອງຕ່າງດ້າວ ໂດຍການລະບາຍສິນຄ້າປະເພດວັດຖຸດິບອອກ ແລະ ດູດເອົາສິນຄ້າ ບໍລິໂພກເຂົ້າມາ. ເຖິງຢ່າງໃດກໍດີ, ໃນຖານະວ່າຢູ່ຕິດໆກັນ ເຂດຕົວເມືອງທັງຫລາຍ ກໍຜັດທະນາຕົນເອງ ກາຍເປັນສູນກາງ ແຫ່ງການຄົມມະນາຄົມທີ່ສຳຄັນ ແລະການໃຫ້ບໍລິຫານສຳລັບຊົນນະບົດອ້ອມຂ້າງ. ຕົວເມືອງ ເຊັ່ນ ກວາລາ ລຳເປີຣ໌ ຢູ່ ມະລາຢູ, ໄຊງ່ອນ ໃນໂກແຊງຊີນ ແລະ ມີດານ ໃນ ສຸມາຕຣາ ໄດ້ກາຍເປັນສະຖານີສຳລັບຕານ່າງ ຖະຫນົນ, ທາງລົດໄຟ ແລະການຄົມມະນາຄົມອື່ນໆ ເຊິ່ງບໍ່ພຽງແຕ່ ຂົນສົ່ງສິນຄ້າ ເຊັ່ນ ຢາງດິບ, ແຮຊຶນ ແລະນົມຜົງເທົ່ານັ້ນ ແຕ່ຍັງຂົນສົ່ງຜູ້ຄົນແລະ ແນວຄວາມຄຶດໄປ ມາອີກ. ໃນເວລາດຽວກັນ ການຄົມມະນາຄົມ ທີ່ໄດ້ຮັບການປັບປຸງ ກໍໄດ້ມີສ່ວນຊ່ວຍ ແລະກາຍເປັນ ສ່ວນນຶ່ງແທ້ໆໃນການສ້າງລະບົບການປົກຄອງ ທີ່ກຳລັງຊັບຊ້ອນຂຶ້ນເລື້ອຍໆ (ນັບໄປແຕ່ ການສຳຫລວດ ທີ່ດິນ ແລະຕຳຫລວດ ຮອດໂຮງຮຽນ, ການສ້າງຖ້ຽຢາ/ໂຮງຫມໍນ້ອຍເຄື່ອນທີ່) ຢູ່ໃນເຂດຊົນນະບົດ ເຊິ່ງ ລັດຖະບານອານານິຄົມທັງຫມົດ ຖືວ່າ ເປັນການຊ່ວຍເຫລືອ ທີ່ຈຳເປັນຕໍ່ການຜັດທະນາເສດຖະກິດ ແລະ ມາຈາກລັດແທ້ໆ. ເຖິງແມ່ນວ່າການຕິດຕໍ່ກັນໄປມາລະຫວ່າງ ຕົວເມືອງກັບຊົນນະບົດ, ລະບົບຄົມມະ ນາຄົມ ກັບການບໍລິຫານ ຍັງສະຫລັບຊັບຊ້ອນກໍຕາມ, ເບິ່ງໃຫ້ງ່າຍໆ ກໍແມ່ນການໄຫລໄປມາ ລະຫວ່າງ ສອງຝ່າຍນັ້ນເອງ. ຈາກໃນເມືອງ ນັກຂົນສົ່ງ ຫອບເອົາຄ່ານິຍົມຂອງເມືອງເອກ ກັບວັດທະນະທຳ ໃນ ເມືອງເຂົ້າໄປປະຕິບັດຫນ້າທີ່ແບບສົມບູນ ແລະແຜ່ລາມອອກຄ້າຍຄືກັນ ແຕ່ຫາກເຂັ້ມຂຸ້ນກວ່າ ອັນທີ່ຕົວ ເມືອງເຄີຍມີມາ ແຕ່ຄາວກ່ອນຍຸກອານານິຄົມ. ໃນອີກທິດທາງນຶ່ງຜູ້ຄົນຈຳນວນ ມະຫາສານຈາກບ້ານ ແລະສັງຄົມຊົນນະບົດກໍຫລັ່ງເຂົ້າເມືອງ ທຸກຄົນທີ່ເດີນທາງເຂົ້າເມືອງ ນຳເອົາບໍ່ພຽງແຕ່ຄວາມມຸ່ງຫວັງ ບວກປົນດ້ວຍຄວາມຢ້ານກົວຕິດຕົວໄປນຳ ແຕ່ຍັງເອົາຄ່ານິຍົມ/ຄວາມມັກ ແນວຄວາມຄຶດ ແລະນິໄສ ໃຈຄໍ ເຂົ້າໄປໂຣະໃສ່ເບົ້າຫລໍ່ໃນເມືອງນຳອີກ. ແຕ່ລະດ້ານຂອງຫຸ້ນສ່ວນຕ່າງກໍບຳລຸງລ້ຽງສິ່ງເສີມເຊິ່ງກັນ ແລະ ກັນ ເຮັດໃຫ້ຕົວເມືອງ ກາຍເປັນຕົວການສຳຄັນກວ່າຫມູ່ສຳລັບການຫັນປ່ຽນໃນຍຸກທັນສະໄຫມ.

ຜູ້ຄົນສ່ວນໃຫຍ່ ທີ່ເດີນທາງເຂົ້າມາໃນເມືອງນັ້ນ ແມ່ນຍ້ອນເຫດຜົນທາງເສດຖະກິດ. ຄວາມເປັນ ຈິງຂອງການອ້າງອີງນັ້ນ ປາກົດຢ່າງຈະແຈ້ງ ໃນກໍລະນີຂອງຜູ້ອົບພະຍົບຊາວຕ່າງດ້າວ ເຊັ່ນ ຄົນຈີນທີ່

ມີຫລາຍກວ່າຊາດອື່ນໆ ໃນຕົວເມືອງຂອງອາຊີຕາເວັນອອກສຽງໃຕ້ ແລະແນ່ນອນວ່າຢູ່ໃນບັນດາ ເມືອງ ໃຫຍ່ໆກວ່າຫມູ. ແຕ່ເບິ່ງວ່າ ມີທ່າອຽງວ່າຈະເປັນດັ່ງດຽວກັນສຳລັບຊາວມາເລ, ຟິລິບປິນ ຫລື ຊາວນາ ຊະວາ ທີ່ເຂົ້າມາຢູ່ ກວາລາລຳເປີ, ມະນີລາ ຫລື ຈາກາຕາ. ບໍ່ວ່າໃນກໍລະນີໃດ ການຫລັ່ງໄຫລເຂົ້າສູ່ຕົວ ເມືອງທັງຫມົດ ແມ່ນເພື່ອມາຢູ່ແບບຖາວອນ, ນອກຈາກຜູ້ເຂົ້າມາຢ້ຽມຢາມມື້ນຶ່ງວັນດຽວ ເຊິ່ງຕາມ ນິຍາມ ແມ່ນຜູ້ທີ່ມາຈາກບ່ອນບໍ່ໄກເກີນສາມ-ສີ່ໄມ ເພື່ອເຂົ້າມາຂາຍຜັກແລະໄຂ່ ນອກນັ້ນ ກໍແມ່ນຜູ້ມາ ເຮັດວຽກຮັບຈ້າງເປັນຍາມ ຕາມຫນ້າວຽກ (ຖືເອົາລະຍະເວລາຫວ່າງຈາກວຽກງານກະສິກຳຢູ່ບ້ານ) ຍັງມີຜູ້ປະລະຄອບຄົວໄວ້ເບື້ອງຫລັງ ດົນນານພໍສົມຄວນ ເພື່ອມາເຮັດວຽກ ເປັນຄົນໃຊ້ຕາມບ້ານເຮືອນ, ລາກແຊ(ລົດລໍ້) ແລະ ເປັນກຳມະກອນເປັນບາງຄັ້ງຄາວ ແລະຕະຫລອດເວລາ ພວກຊາຍຫນຸ່ມສ່ວນໃຫຍ ທີ່ມັກເຂົ້າມາສະແຫວງໂຊກຢູ່ໃນເມືອງແນວນີ້ ອາດສາມາດ ຫລື ບໍ່ສາມາດກັບຄືນບ້ານເກີດ ເພື່ອຕັ້ງ ຮາກຖານເລີຍ. ຄືດັ່ງຊາວຈີນ ພວກເຕົ່າກາຍ (towkay) ເຊິ່ງມີການເລົ່າລືມາຕະຫລອດວ່າ ມາເພື່ອສະ ແຫວງໂຊກລາບເທົ່ານັ້ນ ແຕ່ບາດແລ້ວກໍຕ້ອງກັບຄືນໄປຕາຍນຳພໍ່ແມ່ບັນພະບຸລຸດຂອງຕົນ, ພວກ"ຊາວນາ ໃນເມືອງ" ມັກຮັກສາຄວາມໃກ້ຊິດຕິດພັນກັບທາງ ບ້ານເກີດ ມັກກັບເມືອສະຫລອງບຸນປະເພນີ ຕ່າງໆ ແລະມີຄວາມຫວັງສະເຫມີວ່າ ຈະຫາເງິນໄດ້ພຽງພໍ ເພື່ອຊື້ດິນໄວ້ຢູ່ ຕອນອອກກິນບຳນານ.

ໃນຕົວເມືອງໃຫມ່ເກືອບທັງຫມົດ ຄືໆກັບເມືອງເກົ່າ ປະຊາຊົນຊົນຊາດນຶ່ງດຽວ ຫລື ຈາກທ້ອງຖິ່ນ ດຽວ ຫລື ຈາກຕະກູນພາສາດຽວ ມັກຢູ່ຮວມກັນໃນຄຸ້ມໃດຄຸ້ມນຶ່ງ. ເຖິງແມ່ນວ່າ ທຳອິດ "ການແບ່ງ ເຂດຄຸ້ມ" ຂອງເມືອງ ບາງເທື່ອມາຈາກການຕັດສິນໃນດ້ານການປົກຄອງ, ປະຊາຊົນເອງກໍມີທ່າອຽງ ມັກແບບນັ້ນ, ເພາະເຮັດໃຫ້ພວກເຂົາຫມັ້ນໃຈກ່ຽວກັບຄົນເຮືອນໃກ້ ທີ່ມີພາສາປາກເວົ້າ ສາສະຫນາ ນິໄສ ໃຈຄໍ ຢູ່ກິນ ຄ້າຍຄືກັນ ທັງເຂົ້າໃຈກັນດີ ສາມາດຊ່ອຍໃຫ້ຊຸມຊົນດຳລົງຄົງຕົວຕໍ່ໄປ. ເປັນບາງຄັ້ງ ເຊັ່ນຢູ່ ມະນີລາ ມາຮອດຍຸກປາຍການປົກຄອງຂອງສະເປນ ຊາວເມືອງມີຮອດສະພາປົກຄອງທ້ອງຖິ່ນຕົນເອງ ເອີ້ນວ່າ ເກຣມິໂຍ (gremio). ຮູບແບບຂອງເຮືອນຢູ່ອາໄສ ປະເພດນີ້ ມີໃຫ້ເຫັນຢູ່ໃນບ່ອນທີ່ຜູ້ຄົນມີອາຊີບ ວຽກງານແບບດຽວກັນ. ທັງສອງສະພາບນີ້ ຮວມກັນແລ້ວ ຊ່ອຍໃຫ້ຜູ້ມາໃຫມ່ຫາໄດ້ທັງວຽກງານ ທັງ ບ່ອນຢູ່ອາໄສ. ສິງກະໂປ ເຖິງແມ່ນວ່າ ມີຄວາມແຕກຕ່າງຫລາກຫລາຍ ກໍຫາກມີສະພາບແບບນີ້ຫລາຍ ຢູ່ໃນລະດັບໃດນຶ່ງ. ໃນເຂດບ່ອນຢູ່ອາໄສ ຂອງຊາວມາເລ ໃນໃຈກາງ ສິງກະໂປ ຖະຫນົນ ບູກິສ ເປັນສູນ ກາງການຄ້າຂາຍ ສຳລັບພວກພໍ່ຄ້າທາງທະເລຊາວບູກິສ ຈາກຫມູ່ເກາະດອນ ກ້ຳຕາ ເວັນອອກ ແລະຢູ່ ກຳປົງຊະວາ ກໍມີຄຸ້ມເຂດຮ້ານຄ້າຂາຍອາຫານ ຮ້ານກາເຟ ແລະຮ້ານນ້ອຍຂາຍດອກໄມ້ ຂອງແມ່ຍິງ ຊາວບ້ານ. ຢູ່ບ້ານ ບາວຽນ ປົງດົກ ເຮືອນແບບຫລັງດຽວໆ ຫລື ເຮືອນເປັນຈຸ້ມ ເຊິ່ງ ຜູ້ຄົນທີ່ອາໄສຢູ່ ແມ່ນ ມາຈາກບ້ານເດີມດຽວກັນ ມາຢູ່ຮ່ວມກັນ ຄືກັນກັບເປັນຊຸມຊົນນຶ່ງ ສົມທົບກັບການ ມີສະຖາບັນຕາມ ປະເພນີ ທີ່ປະກອບດ້ວຍຈຸລະຈັກກະວານນັ້ນ ກໍເປັນຖານທີ່ພັກຊົ່ວຄາວ ໃຫ້ແກ່ຊາວ ບາວຽນອົບພະຍົບ ກ່ອນຈະອອກໄປສູ່ເມືອງໃຫຍ່ ເພື່ອຫາເຮັດວຽກ ຕົ້ນຕໍແມ່ນໄປເປັນຄົນລ້ຽງມ້າ ຂັບລົດມ້າ ແລະໃນທີ່ສຸດ ກໍໄດ້ເປັນຄົນຂັບລົດ.

ເມື່ອຕົວເມືອງໃຫຍ່ຂຶ້ນ ຈຳນວນປະຊາກອນເພີ່ມຂຶ້ນເອງ ແລະຍ້ອນມີການອົບພະຍົບເຂົ້າມາບໍ່ ຂາດ ແລະຍ້ອນວ່າຄ່າເຊົ່າດິນກັບເຮືອນສູງຂຶ້ນຊັກໃຊ້ ບວກໃສ່ກັບສະພາບອັນເສື່ອມໂຊມຂອງເຂດເກົ່າແຕ່ ທັງຫມົດນີ້ຊຸກດັນໃຫ້ມີການຊື້ສະຖານທີ່ທຳມາຄ້າຂາຍແຫ່ງໃຫມ່ຢູ່ໃນເມືອງ, ຮູບແບບທີ່ຢູ່ອາໄສແລະວິຊາ ອາຊີບອັນດັ້ງເດີມກໍມີຫລາກຫລາຍແລະສັບສົນປົນກັນ. ສະຖາບັນແຫ່ງລະຍະຂ້າມຜ່ານທັງຫລາຍ ເຊັ່ນ ກຳປົງ ຫລື ບ້ານໃນເມືອງ ເຊິ່ງກໍຄ້າຍຄືກັບ ບາວຽນ ປົງດົກ, ສ້າງຄວາມສະດວກ ໃຫ້ແກ່ຊາວນາ ໃນ ການເຄື່ອນໄຫວເຂົ້າ ສູ່ຕະຫລາດແຮງງານໃນເມືອງ ເຊັ່ນ ຈາກາຕາ, ກວາລາລຳເປີ ແລະ ຢ່າງກຸ້ງ, ສະຖາບັນເຫລົ່ານັ້ນຖືກຍູ້ດັນ ໃຫ້ອອກຫ່າງຕົວເມືອງ ຫລື ບໍ່ກໍກາຍເປັນບ່ອນທີ່ມີຜູ້ຄົນຢູ່ຫນາແຫນ້ນເກີນ ໄປ ແລ້ວກາຍເປັນທີ່ຢູ່ອັ່ງອໍ ຂາດສຸຂະອະນາໄມ. ຮູບແບບການຈັດຕັ້ງທາງສັງຄົມຕາມປະເພນີ ຫລື ອັນທີ່ເກີດໃຫມ່ຂອງມັນ ໄດ້ກາຍເປັນສິ່ງທີ່ບໍ່ຫມັ້ນຄົງຫລາຍຂຶ້ນ ສຳລັບຜົນກະທົບກະຈັດກະຈາຍຂອງລັດ

ທິເອກະເທດນິຍົມແບບຄົນໃນເມືອງ ແລະທີ່ສຳຄັນຍິ່ງໄປກວ່ານີ້ ມັນບໍ່ສອດຄ່ອງກັບການສະແຫວງຫາ ຖານະແລະກຽດສັກສີ ຢູ່ໃນຫນ່ວຍລວມຂອງໂຄງສ້າງທາງສັງຄົມເມືອງ. ແຕ່ເຖິງແມ່ນວ່າ ໄດ້ເກີດອຸບັດເຫດ ຫລາຍຢ່າງຕະຫລອດທາງເດີນກໍຕາມ ຂັ້ນຕອນນັ້ນ ກໍບໍ່ໄດ້ມີແຕ່ດ້ານຫຍໍ້ທໍ້ທັງຫມົດ. ເປັນຄວາມຈິງ ທີ່ວ່າຊີວິດໃນເມືອງ ມີທ່າອຽງເຮັດໃຫ້ສັງຄົມຕາມປະເພນີອ່ອນແອລົງ ແລະສູນເສຍຄວາມເຊື່ອຖື ແລະຄ່ານິຍົມແບບດັ້ງເດີມໄປ ແຕ່ມັນກໍຍັງມີດ້ານບວກຫລາຍຄືກັນ - ເຊັ່ນວ່າ ໂອກາດໃຫມ່ໆ ສຳລັບ ສ້າງຄວາມສາມາດ, ຄວາມຊຳນານໃນວຽກງານ ແລະການສ້າງສາຍສຳພັນໃຫມ່ກັບຜູ້ຄົນທີ່ມີພື້ນຖານທາງສັງຄົມ ແລະ ປະສົບການແຕກຕ່າງກັບຕົນ, ສະຫນອງຈຸດພົ້ນໃຫມ່ ແລະຄວາມສົນໃຈຮ່ວມກັນ, ອິດສະລະພາບ ທາງຄວາມຄຶດ ແລະການກະທຳໃນແນວທາງໃຫມ່ ແລະກ້ວ້າງຂວ້າງກວ່າ. ສຳລັບຫລາຍຄົນ ໂດຍສະເພາະຜູ້ຫນຸ່ມສາວ ຊີວິດໃນເມືອງ ບໍ່ແມ່ນມີແຕ່ການທຳລາຍຄວາມຮູ້ ສິ່ງຄຸ້ນເຄີຍ ແລະຄວາມຫມັ້ນຄົງ ດັ່ງທີ່ເຄີຍພັນລະນາໄວ້ເລື້ອຍໆ ແຕ່ມັນໄດ້ໃຫ້ໂອກາດ ແກ່ພວກເຂົາໃຫ້ຫລຸດພົ້ນອອກຈາກພັນທະສາຍເຄືອຍາດ ແລະແຮງກົດດັນຈາກອຳນາດອື່ນ ແລະອຳນວຍໃຫ້ສ້າງຊີວິດໃຫມ່ ດ້ວຍຕົນເອງ.

ຜົນຜະຫລິດນຶ່ງຂອງຂະບວນວິວັດ ແຫ່ງສະຖາບັນຕາມປະເພນີ ຢູ່ໃນຕົວເມືອງ, ຂອງຄວາມຕ້ອງການໃນການສະແຫວງຫາຮູບແບບໃຫມ່ ແຫ່ງຄວາມຫມັ້ນຄົງທາງສັງຄົມ, ຂອງການຄົ້ນຫາກຸ່ມສະແຫວງຜົນປະໂຫຍດໃຫມ່ ແລະຂອງຄວາມປາຖະຫນາເພື່ອການປັບປຸງຕົນເອງ ຖ້າມກາງບັນຍາກາດແຫ່ງການຊ່ວງເສັງນັ້ນ ແມ່ນການການອຸບັດຂຶ້ນຂອງ"ສະມາຄົມອາສາສະຫມັກ" ທັງຫລາຍ. ເອກະຊົນບຸກຄົນຮ່ວມກັນ ຫລື ຊ່ວຍກັນ ເພື່ອຈັດຕັ້ງສະໂມສອນ ແລະສັງຄົມຕາມໃຈມັກ ຫລາຍກວ່າໃຫ້ສັງກັດໄປຕາມຊາດກຳເນີດໂດຍບັງເອີນ. ສະມາຄົມທັງຫລາຍ ເກີດຂຶ້ນປານດອກເຫັດທົ່ວສັງຄົມ ຕົວເມືອງໃນພາກພື້ນອາຊີຕາເວັນອອກສຽງໃຕ້ ເມື່ອທ້າຍສະຕະວັດທີສິບເກົ້າ ແລະຕົ້ນສະຕະວັດທີຊາວ. ຄວາມຫລາກຫລາຍມາກມາຍ ຂອງສະມາຄົມ ສະທ້ອນອອກເຖິງຄວາມຊັບຊ້ອນສັບສົນ ຂອງກະໂຕຊີວິດຕົວເມືອເອງ, ແຕ່ກໍຍັງເປັນໄປໄດ້ ທີ່ຈະຈຳແນກປະເພດສຳຄັນຈຳນວນຫນ້ອຍນຶ່ງ. ສະໂມສອນຈຳນວນນຶ່ງທີ່ມີຂຶ້ນກ່ອນໆ ຫມູ ສ່ວນຫລາຍ ລ້ວນແຕ່ແມ່ນເພື່ອການພັກຜ່ອນ ມ່ວນຊື່ນ ຕົ້ນຕໍ ແມ່ນສະໂມສອນເຕະບານໃນສິງກະໂປເປັນຕົວຢ່າງ, ຫນັງສືພິມມາເລສະບັບສຳຄັນໆ ໄດ້ອອກຂ່າວວ່າ ເປັນການຫລິ້ນທີ່ໄຮ້ປະໂຫຍດ ເປືອງເວລາລ້ວນໆ. ສະມາຄົມອາສາສະຫມັກອີກຮູບແບບນຶ່ງທີ່ເກົ່າແກ່ ແລະແຜ່ຫລາຍ ແມ່ນສະມາຄົມອຸດຫນູນການສົ່ງສະການ ເຊິ່ງຕັ້ງຂຶ້ນ ເພື່ອຮັບປະກັນໃຫ້ມີພິທີສົ່ງສະການ ອັນເຫມາະສົມສຳລັບສະມາຊິກໃນຄອບຄົວກັບຍາດພີ່ນ້ອງໃກ້ຊິດ ພໍພຽງແຕ່ສະຫມັກເຂົ້າເປັນສະມາຊິກແບບງ່າຍໆ. ສະມາຄົມນຶ່ງ ທີ່ຍິ່ງໃຫຍ່ກວ່າຫມູ່ໃນສາຍຕາ ນັກປະຫວັດສາດສັງຄົມ-ແມ່ນປະເພດທີ່ຫນ້າສົນໃຈ ແມ່ນອັນທີ່ເອີ້ນກັນວ່າ ສະມາຄົມ "ສົ່ງເຄາະດ້ານວັດທະນະທຳ ແລະຄວາມກ້າວຫນ້າ" - ສະໄມສອນໂຕ້ວາທີ, ສະໂມສອນວັນນະຄະດີ, ກຸ່ມຄົ້ນຄວ້າ, ສະມາຄົມປະຕິຮູບສາສະຫນາ, ສະມາຄົມເພື່ອສົ່ງເສີມພາສາ. ທັງຫມົດນີ້ ຄ້າຍຄືກັນຫມົດຄືມີການຊີ້ນຳໂດຍພະນັກງານລັດ ຜູ້ມີພື້ນຖານການສຶກສາ ຈາກຕາເວັນຕົກ, ນັກບວດ, ຄູສອນ ສາສະຫນາ ຫລື ຄູສອນທຳມະດາ ຫລື ສະມາຊິກບໍ່ປະຈຳ ຂອງຊົນຊັ້ນນຳຕາມປະເພນີ ແຕ່ລະສະມາຄົມ ໄດ້ດຳເນີນການໄປຕາມວິໄສທັດຂອງຕົນ, ເພື່ອສ້າງສັນສິ່ງໃຫມ່ ແລະ ຮູບພາບອັນໃຫມ່ໃຫ້ແກ່ສັງຄົມ ຂອງຕົນ.

ພາຍໃຕ້ສະຖານະການຢູ່ກ້ອງອຳນາດຂອງການປົກຄອງເຈົ້າອານານິຄົມ ແລະການຄອບຄອງທາງເສດຖະກິດຂອງຕ່າງຊາດ ເຊິ່ງ ບໍ່ໂດຍທາງໃດກໍທາງນຶ່ງ ໄດ້ສ້າງຄວາມຫຍຸ້ງຍາກ ໃຫ້ແກ່ອາຊີຕາເວັນອອກທັງຫມົດ, ບັນດາສະມາຄົມປະເພດຕ່າງໆທີ່ເວົ້າມາຂ້າງເທິງນັ້ນ ໄດ້ເຕົ້າໂຮມເອົາຜູ້ຄົນໃນ ເມືອງ ທັງພະມ້າ ຊະວາ ຫລື ຟີລິບປິນ ໃຫ້ເຂົ້າມາແລະຊວງເສັງກັນຢູ່ໃນໂລກທັນສະໄຫມ ດ້ວຍຄວາມ ບຸກບືນສຸດຂີດ, ຈຶ່ງເປັນການຍາກທີ່ຈະຫລີກເວັ້ນຈາກຄວາມລົ້ມເຫລວເລັກໆນ້ອຍໆ ຕາມຄວາມເຊື່ອ ທີ່ອຳນາດອານານິຄົມ ອີງເອົາເປັນພື້ນຖານ. ໃນຄວາມເປັນຈິງແລ້ວ ການຈັດຕັ້ງຂອງພວກເຂົາ ໄດ້ດຶງເອົາພວກເຂົາເຂົ້າຢູ່ພາຍໃຕ້ການຄວບຄຸມຕິດຕາມ ຂອງພວກເຈົ້າຫນ້າທີ່ອານານິຄົມ ພໍພຽງແຕ່ອ່ານຕາມເນື້ອຄວາມໃນຫນັງສືພິມລາຍວັນ ວາລະສານທີ່ກ້ວ້າງຂວ້າງທີ່ສຸດ ທີ່ພວກເຂົາເຄີຍອາໄສ ສະແດງຄວາມຄຶດ

ເຫັນອອກເລື້ອຍໆນັ້ນ ໃນຫລາຍໆເທື່ອ ການຈັດຕັ້ງກໍຖືກຍຸບເລີກໄປ, ອາດມີເລື້ອຍກວ່າຫມູ່ໃນ ຫວຽດນາມ ຝຣັ່ງ. ເຖິງແນວໃດກໍດີ ຄວາມເຫມາະສົມຂອງສະມາຄົມ ທີ່ຈັດຕັ້ງຂຶ້ນໃນຕອນທຳອິດນັ້ນ ໄດ້ປູພື້ນໄວ້ ຫນ້ອຍກວ່າ ສຳລັບສິ່ງທີ່ພວກເຂົາເຮັດໄດ້ສຳເລັດ ໂດຍອາໄສວິທີການປະເຊີນຫນ້າທາງການເມືອງ ທີ່ ເກີດຂຶ້ນບໍ່ເລື້ອຍເທົ່າໃດ ຢູ່ໃນສະຫນາມການເຝິກທີ່ພວກເຂົາຈັດຫາມາ ເພື່ອຕໍ່ສູ້ກັບບັນຫາໃຫມ່ ແລະສ້າງ ຄົນຮຸ່ນໃຫມ່ ສຳລັບການເປັນຜູ້ນຳພາ ແລະສາວົກ ດ້ວຍການເຝິກອົບຮົມໃນສະໂມສອນ, ການປະຊຸມໃຫຍ່, ການຕິດຕາມບັນຊີ, ການຕັ້ງສະຖາບັນດຳເນີນການເລືອກຕັ້ງ, ນຳຂ່າວສານຈາກພາຍນອກເຂົ້າມາ ແລະ ເຜີຍແຜ່ຢູ່ພາຍໃນສະມາຄົມ. ເມືອງໃຫຍ່ໆໃນອາຊີຕາເວັນອອກສຽງໃຕ້ ປະກອບ ດ້ວຍອົງກອນຕ່າງດ້າວ ອ້ອຍຕ້ອຍ ສຳລັບສ້າງສັງຄົມ ເຊິ່ງໃນນັ້ນ ພວກເຂົາມີສ່ວນປະສົມຢູ່ຫນ້ອຍຫລາຍ ຕົວຢ່າງ ມີຄົນມາເລ ທັງຫມົດຫນ້ອຍກວ່າ ຫ້າສ່ວນຮ້ອຍ ດຳລົງຊີວິດຢູ່ໃນຕົວເມືອງ ເຊິ່ງພວກເຂົາປະກອບເປັນສິບສ່ວນຮ້ອຍ ຂອງປະຊາຊົນທັງຫມົດ, ແຕ່ຄວາມສຳຄັນຂອງເມືອງ ນອນຢູ່ພາຍນອກຂອບເຂດຂອງອັດຕາສ່ວນປະຊາ ກອນ ມັນຂຶ້ນກັບຄວາມສາມາດໃນການໃຫ້ກຳເນີດແກ່ຊົນຊັ້ນຜູ້ນຳຮຸ່ນໃຫມ່.

## ບັນດາ ເມືອງ ທີ່ມີປະຊາກອນ ກວ່າ 100,000 ຄົນ

| ປີ 1910 | | | |
|---|---|---|---|
| 100,000 - 300,000 | | | 300,000 - 500,000 |
| ມັນດາເລ | ດອນ ປີນັງ | ຊູຣາກາຣ໌ຕາ | ຢາງກຸ້ງ |
| ຣາໂນຍ | ສິງກະໂປ | ຊູຣາບາຢາ | ບາງກອກ |
| ໄຊ່ງອນ - ໂຊລອງ | ຊູກາຣ໌ຕາ | ມານິລາ | |

| ປີ 1930 | | |
|---|---|---|
| 100,000 - 300,000 | 300,000 - 500,000 | 500,000 - 1,000,000 |
| ມັນດາເລ | ມະນິລາ | ຢາກາຣ໌ຕາ |
| ຣາໂນຍ | ຢາງກຸ້ງ | |
| ດອນປີນັງ | ບາງກອກ | |
| ກວາລາລຳເປີຣ໌ | ໄຊ່ງອນ-ໂຊລອງ | |
| ຊູຣາບາຢາ | ສິງກະໂປ | |
| ບັນດຸ້ງ | | |
| ຢອກຢາກາຣ໌ຕາ | | |
| ເຊມາຣັ້ງ | | |
| ຊູຣາກາຣ໌ຕາ | | |

| ປີ 1960 | | | |
|---|---|---|---|
| 100,000 - 300,000 | | | |
| ມັນດາເລ | ຊຳບິ | ບັນດຸ້ງ | ຊຳບວ້ງກາ |
| ມູລມຽນ | ທິລຸກເບຕອ້ງ | ເກດິຣິ | ດາເວ້ົາ |
| ຣາຍຟອ້ງ | ເປມັນຕັ້ງຊຽນຕາຣ໌ | ປອນເຕຽນຽກ | ຊູຣາກາຣ໌ຕາ |
| ເໜ້ ວ | ບໍກໍ ຣ໌ | ບັນຂາມາຊິນ | ເຊມາຣັ້ງ |
| ດານັ້ງ | ຊິຣິບອນ | ມານາໂດ | ມາລັ້ງ |
| ວຽ້ງຈັນ | ປີກາລອ້ງກັນ | ບາໂຄໂລດ | ມາກາສສາຣ໌ |
| ດອນ ປີນັ້ງ ໄອເປາະ | ມາດຽນ | ອິລອຍໂລ | |
| ເປດັ້ງ | ຊູຣາບາຢາ | ເຊບູ | |

| 300,000 - 500,000 | ຫລາຍກວ່າ 1,000,000 |
|---|---|
| ຣາໂນຍ | ໄຊ່ງ່ອນ - ໂຊລອງ |
| ພະນົມເປັນ | ບາງກອກ |
| ກົວລາລໍເປີ | ສິງກະໂປ |
| ເມດັນ | ຢາກາຕ໌ຕາ |
| ປາລໍາບັງ | ຊູຣາບາຢາ |
| ຢອກຢາກາຕ | ມະນິລາ |

| ປີ 1980 | | | |
|---|---|---|---|
| 100,000 - 300,000 | | | |
| ມູລນຽນ | ຊອກເຊີ ທາວ໌ | ເຊຣິບອນ | ບາໂກໂລດ |
| ອາກູຢັບ | ຈະໂຮເຣະບາຮູ | ຈໍາບີ | ອິລອຍໂລ |
| ສົງຂລາ | ປິຕາລິງ ໄຊຍາ | ເກດິຣິ | ກາກາຢານ ດີໂອຣິ |
| ຊົນບູຣີ | ເກລັງ | ມາດຽມ | ເອງຊິເລສ |
| ນะຄອນສີທັມມะຣາດ | ກົວລາ ເຕຣັງການู | ມານາໂດ | ບูຕວນ |
| ຊຽງໃຫມ่ | ໂກຕາ ບาຮู | ເປກັງມาຮู | ອีລิกัน |
| ยาตรัง | ไตปิง | เปกาลิงกาน | ธาลิงกาโป |
| ภียิน | กอนตัน | เปมันตัง ซุรงตา | บาตังกาส์ |
| ເຫ้ | ເຊຣໍາບັງ | โปรโบลิงโก | กาบาบาตวน |
| ภันโถ | โกตา ภินาบาลู | ซามาธินดา | ซานปาโบล |
| ภัมรัน | ອัมบิน | ซูกาบูมิ | กาดิส |
| ວังเต่า | บาลิปาปัน | ตังจูงการัง | |
| ดาลัด | บໍกร์ | เตกาน | |
| 300,000 - 500,000 | 500,000 - 1,000,000 | | ຫลายกว่า 1,000,000 |
| บาสซุรน | มันดาเล | | ยางกุง |
| วรงจัน | พะนมเปัน | | บางกอก |
| ดานัง | กัวลาลำเปิร์ | | ธาโนย |
| อิโป | เปลำบัง | | นะครบ โธจิมิน |
| สูธาการ์ตา | อูจุงปันดัน | | รายฟอง |
| ยอกยาการ์ตา | มาลัง | | สิงกะโป |
| บันจาร์มาสิน | ปาดัง | | ยาการ์ตา |
| ปอนติบรก | ดาวาว | | สูราบายา |
| เซบู | | | บันดุง |
| ซำบวงกา | | | เมดัน |
| | | | เซมารัง |
| | | | มะนิลา |

## ภาบสึภสา ๒ละพาสา

ນັภຂຽบຊาวมาเล เมื่อสะตะวัดทิสิบเภ้า ให้ข้อสังเภดไว้เพื่อบึ่งว่า ภาบสะถาปะบา สิงภะโป ได้เบาะ "พะยาบาภจาภหบอบ ๒ละได้หบอบจาภพะยาบาภ". บ่มิหยังเป็บส่อบติ่ม เสิมใส่ภาบลอภถาบ เชิ่งบ่อว่าในถอามหมายใดๆ ภ็เป็บได้พรึงปาภ็ดภาบที่อๆไปอับบึ่งขอวอาชิ ตาเวับออภสรึงใต้หลายภว่า ภาบเป็บละบ็บภาบสึภสา ขอวพวภภำอำบาดอาบานิถ็ม. "๓ต ถอามธู้ ที่ให้๓ภ่ปะชาชับพายใต้อิดทิพับต่างปะเทด" นักขรึบมาเล อิภถ็บบึ่ว โต้๓ยางไว้ ในปี 1927," บ่มิถอามปะสิวอื่บใด บอภจาภภาบเธัดให้ปับยาชับ อึดยาภถอามถึดปับยาลิว ๒ละ สอบให้พวภเอ๊าลูบเลรึสิ้บเภิบโบภ ขอวบายเหบือหัวขอวพวภเอ๊า. ละหว่างสอวถอามถึดเห็บ บี้ อับทิบึ่วมิลักสะบะทางสังถ็มสึภสา ๒ละไธ้ถอามหลิวใหล ส่อบอับทิสอว มิลักสะบะภาบ เมืองๆ ๒ละธุ่มธ้อบฟึดเถือด ทังสอวเบั้บให้เห็บถอามป่รึบ๓ปวๆ, ผูภมัดทังบับหา ๒ละถอาม สับสิบในถอามเอ๊าใจต่เหตภาบที่เภิดขึ้บ, ผิบภะทิบ ๒ละเจตะบาขอวขะบอบภาบ เชิ่งมักธู้จัภ ภับในสะไหมบั้บ ในบาม "ภาบสั่วสอบสาหาละบะชับ"

ละบ็บภาบปึภถอวๆอาบาบิถ็มเอิธ็บ ถืภบำมาใช้ภับสังถ็มอาชิตาเวับออภสรึงใต้ ด้วย ถอามเอั้มข้บต่างภับ แต่ส่อบหลายมักมิจุดปะสิวถรึอภับถื ภาบจัดธูบ๓บบบภาบปึภถอวลัดใน ๓บอหางขะหยายเหว้ำพะลังให้หลายขึ้บ, อับทิบึ่ว ในถาบะผู้ผะหลิดอัดถุดิบ ๒ละอาหาบสำ ลับ สิ่วไปปะเทดตาเวับต็ภ, อับทิสอว ในถาบะเป็บตะหลาดสำลับสิบค้าผะหลิดจาภปะเทด ตาเวับต็ภ. ธูบ๓บบภาบถอบคุบ ๒ละขอบเขดภาบเอ้าแขภแขวภาบปึภถอวขอวลัด ที่จำเป็บ สำลับบับลุจุดปะสิวบั้บ ผิดต่างภับไปตามถอามสำคับ ๒ละภาบถาดหมายหางเสดถะภิด, อิภ ด้าบบึ่ว ภ็ผิดต่างภับไปตามขอบเขดที่ชับชั้บบำในท้องถิ่บภับละบ็บบ่ลิหาบ สามาดปับ๓ปวเอ๊า หาภับ หลื ผ่ใจที่จะป่อยให้ติบเองถืภดึวเอ๊าหาจุดปะสิวขอวภาบจัดตั้ว๓บบตาเวับต็ภ. ในลัด ที่ เอิ้บภับอ่า ถืภปึภถอว โดยหางอ้อมบั้บ ถอามภิดดับหางเสดถะภิดต่ำ เชั่บต๊อย่างบางลัด ใน ๓หลมมาเล ๒ละ ภำพูชา, หลื ในบ่ลิเวบขอบบอภขอวหมู่ถอบดัดช์ อิดิส, พวภชับชั้บ บำเภ่า ยังสืบต่มิบ็ดบาดท้าวหับ ด้าบภาบบ่ลิหาบยู่ในละดับใดบึ่วยู่, เถิวแม่บว่า ได้มิภาบปับปรึบธูบช็วว ใหม่ให้๓ภ่ลัด เพื่อให้สอดถ่อวภับถอามต้องภาบขอวตาเวับต็ภ. เถิวย่างใดภ็ดี ในลัดอื่บๆ อิภ หลายลัด หังๆที่มิถอามพะยายามในขั้บต้บ ในภาบที่จะธักสาไว้ หลื เธัดอรึภผาบ สะถาบับ ภาบปึภถอวท้องถิ่บ, ถอามต้องภาบอับธิบด่อบขอวชาดตาเวับต็ภ ได้ชุภดับภาบเติบใหย่ อับสับ สิบขอวละบ็บอาดยาสิด อับได้สิ่วผิบตอบ๓ทบสูว ๓ภ่ผู้มิสะมัดถะพาบ ๒ละชำบาบ ในด้าบเต็ภ นิภ ที่บ่มิยู่ในท้องถิ่บ หลื บ่ได้มาจาภพายในชับชั้บตามลำดับสังถ็ม. ในหลาย ภ็ละนิ เชั่บ ใน พะม้า ตำ๓ทบ่วภาบปึภถอว อับเป็บขอวท้องถิ่บที่มิมา๓ต่เดิม ถืภลืมถิ้มไป ในภ็ละนิ อื่บๆเชั่บ ในหอรึดบาม ภ็มักมิภาบหลิบหลิภอ่วภาบภาบเมืองไปยู่โดดดรึอ ๓ทบให้ ภาบธ่อมมื.

ในขะบะที่ภาบผัดทะบาหางเสดถะภิดภำลังเติบใหย่ย่างไอวาบั้บ ในลัดที่ปึภถอวโดยภ่ว เอ้าสะเพาะ ภับลัดที่ถืภปึภถอวหางอ้อมที่โยะยาบ๓ด่ ถอามต้องภาบติ้บตำ ขอวพวภภำอำบาด อาบาบิถ็ม, ภ็แม่บสิ่วที่อาดต้องเอิ้บว่า ภำลังแธว่วาบบ่ลิหาบ ถื ผู้ดูแลผู้ชุ่อย ผู้อำบวยภาบ เลขาพะบักว่าบภาบปับชิ ๒ละผู้ชุ่อยด้าบเต็ภบิภ ทุภๆถ็บที่สามาดชอภหามาได้ จาภปะเทด ตาเวับต็ภเอว ด้วยถ่าจ้างแพวๆเท่าบั้บ ถ้าหาภอาพ่หาได้. ในบ่างโอภาด โดยสะเพาะใน มาลายๆ ภับ พะม้าขอวอังภิด ผู้ชุ่อยที่เฝิภมา๓ล้อ แม่บผู้ยู่มา๓ต่เภ่า หลื ชาวอาชิอื่บๆ ที่บ่

ແມ່ນຄົນທ້ອງຖິ່ນ ສ່ວນໃຫຍ່ແມ່ນຄົນອິນເດຽ ຫລື ຈີນ. ໃນເກືອບທຸກກໍລະນີ ຜູ້ຄົນເຫລົ່ານີ້ ບໍ່ໄດ້ຮັບການ ສ້າງຂຶ້ນ ຢູ່ກັບທ້ອງຖິ່ນເລີຍ ທັງໆທີ່ຄວນຕ້ອງເປັນແນວນັ້ນ.

ເມື່ອເປັນດັ່ງນັ້ນ ເລື່ອງນີ້ຈຶ່ງແມ່ນແຮງຊຸກຍູ້ອັນທຳອິດ ແລະອັນຈຳເປັນທີ່ສຸດໃນການສະໜອງ ການເຝິກອົບຮົມແບບຕາເວັນຕົກ ໃຫ້ແກ່ປະຊາຊົນຈຳນວນນຶ່ງ ໃນປະເທດອານານິຄົມອາຊີຕາເວັນອອກ ສຽງໃຕ້, ມີຄຳອະທິບາຍສົມເຫດສົມຜົນອັນນຶ່ງວ່າ ເປັນຫຍັງຈຶ່ງມັກເອີ້ນວ່າ ການບອກສອນ ຫລາຍກວ່າ ການສຶກສາ, ເພາະມັນແມ່ນຂະບວນການທີ່ມີການເຂົ້າໃຈວ່າ ມັນມີຈຸດປະສົງສູງສົ່ງກວ່າ ການເປັນອຸປະ ກອນທຳມາຫາກິນ ໃນນາມຂອງບຸກຄົນອື່ນເທົ່ານັ້ນ. ແຕ່ກໍມີ ແຮງຊຸກຍູ້ອື່ນອີກຫລາຍທີ່ເຂົ້າມາກຽວ ຂ້ອງບາງຢ່າງ ກໍເຫັນໄດ້ຈະແຈ້ງ ບາງຢ່າງກໍມືດມົນສັບສົນ ຫລື ຂັດຄໍກັນເອງ. ບໍ່ມີມະຫາອຳນາດຕາ ເວັນຕົກຜູ້ໃດ ໃນອາຊີຕາເວັນອອກສຽງໃຕ້ ໃນສະຕະວັດທີສິບເກົ້າ ຄອບຄອງເໜືອໜມູ່ໃນເລື່ອງຄວາມ ຮັບຜິດຊອບຕໍ່ດິນແດນ ໂດຍທີ່ໃນເວລາດຽວກັນ ກໍຍົກຕົນຂຶ້ນໃນລະດັບໃດນຶ່ງ ໃນເລື່ອງພາລະກິດຂອງ ຄະນະ "ເຜີຍແຜ່ຄວາມສີວິໄລ" ຫລື ພາລະກິດ ແຫ່ງ ຄວາມສີວິໄລ". ທີ່ແທ້ແລ້ວ ຊາວເອີຣົບຈຳນວນ ຫລາຍ (ຄົນອະເມລິການຳ) ເບິ່ງຕົນເອງເປັນຄື ຄະນະທູດ ທີ່ນຳ ເອົາຄວາມຈະເລີນມາໃຫ້, ດັ່ງຄຳເວົ້າ ໃນບົດກະວີຂອງ "ຮູດຢາຣ໌ ຄິບປລິງ (Rudyard Kiplings) ຊື່ "ພາລະຫນັກໜ່ວງຂອງຄົນຜິວຂາວ", ພວກເຂົາເປັນຜູ້ກຳລັງລໍຄອຍ ຢູ່ໃນພາລະກິດອັນຫນັກໜ່ວງ "ເໜືອຜູ້ຄົນຂີ້ຕົກໃຈ ແລະປ່າເຖື່ອນ/ ຄົນຜູ້ ຍັງໂມໂຫຮ້າຍ ທີ່ຫາກໍຖືກຈັບມາໄດ້ໃຫມ່ໆ, ເປັນປະເພດ "ເຄິ່ງຜີ ເຄິ່ງເດັກນ້ອຍ", ພວກເດັກນ້ອຍມີໄວ້ໃຫ້ ສຶກສາອົບຮົມ ຫລື ຢ່າງຫນ້ອຍກໍເຝິກ ໃຫ້ລ້າງຫ້ອງວິດໄດ້. ຊາວຕາເວັນຕົກຫັງຫລາຍ ບໍ່ພຽງແຕ່ຖືກ ເບື່ອເມົາດ້ວຍພິດຂອງອຳນາດ ກັບຄວາມຊ່າງຄຶດປະດິດສ້າງຂອງຕົນເອງເທົ່ານັ້ນ ແຕ່ຍັງຖືກພິດເບື່ອ ຂອງທິດສະດີແຫ່ງການວິວັດອັນພວມເຫີ່ກັນໃນປັດຈຸບັນນຳອີກ. ຊາວຕາເວັນຕົກ ກຽມພ້ອມຍອມຮັບການ ສົມອ້າງ ຂອງການປົກຄອງອານານິຄົມ ໂດຍອີງໃສ່ການ ໃຫ້ການສຶກສາແນະນຳ. ຄວາມສຳນຶກໃນ ການນຳເອົາປະຊາຊົນຜູ້ຫລ້າຫລັງເຂົ້າມາຫາໂລກກ້າວຫນ້າດ້ວຍການສອນແລະໃຫ້ແບບຢ່າງນັ້ນ ບໍ່ເຄີຍ ຂາດຫາຍໄປຈາກແນວຄວາມຄຶດຂອງພວກນັກປົກຄອງອານານິຄົມ ຈັກເທື່ອ ຍົກເວັ້ນວ່າ ເມື່ອໃດຫມາກ ຜົນຂອງການສິດສອນ ມີທ່າວ່າຈະເຮັດໃຫ້ການປົກ ຄອງອານາ ນິຄົມ ກາຍເປັນສິ່ງເກີນເຫລືອໄປ.

ດັ່ງນັ້ນ ສຳລັບເຫດຜົນທັງຫມົດທີ່ເວົ້າມາ ຂ້າງເທິງນັ້ນ ພວກກຳອຳນາດອານານິຄົມ ພົບວ່າຕົນ ເອງ ໄດ້ເຂົ້າຫຍຸ້ງຢູ່ກັບການຈັດຫາສະຖາບັນການສຶກສາຮູບແບບຕ່າງໆ ສຳລັບປະຊາຊົນ ທີ່ຕົນເອງປົກ ຄອງຢູ່. ເມື່ອຕອນຕົ້ນຂອງສະຕະວັດທີ19 ໃນລະຫວ່າງທີ່ຍຸກເສລີພາບທາງການຄ້າ ທັງທີ່ເປັນແນວຄວາມ ຄຶດເທົ່າໆກັບສິນຄ້າຕົວຈິງ ໂດຍສະເພາະຄົນອັງກິດ ທີ່ຍັງບໍ່ຖືກຂັດຂວາງພໍເທົ່າໃດ ໂດຍຄວາມຕ້ອງການ ທາງດ້ານແຮງງານກົງໆ ພວກເຂົາໄດ້ພະຍາຍາມ ເພື່ອຮັກສາສະຖາບັນພື້ນເມືອງ ຫລື ປັບແປງເອົາໄວ້ ຫມຸນໃຊ້ພິເສດ ແມ່ນຢູ່ໃນ ພະມ້າ. ການອ່ານອອກຂຽນໄດ້ໂດຍພື້ນຖານໃນປະເທດທີ່ນັບຖືພຸດທະສາສະໜາ ໃນອາຊີຕາເວັນອອກສຽງໃຕ້ ແຜ່ນດິນໃຫຍ່ ໄດ້ແຜ່ຂະຫຍາຍໄປຢ່າງກວ້າງຂວາງ ເມື່ອກາງສະຕະວັດທີ 19 ຫລາຍກວ່າທີ່ມັນເປັນຢູ່ໃນເອີຣົບຫລາຍ. ໃນຊຸມປີ 1860 ທ່ານພະຍາ ອາຣ໌ເທີ ໄພເອີຣ໌ (Sir Arthur Phayre) ຂ້າຫລວງປະຈຳພະມ້າ ໄດ້ສະເໜີໃຫ້ປ່ອຍພາລະອັນຫນັກໜ່ວງທາງການສຶກສາ ໄວ້ໃນມືຂອງ ໂຮງຮຽນວັດ ໂດຍສົ່ງເສີມຊຸກຍູ້ ໃຫ້ໂຮງຮຽນວັດດຳເນີນການ, ຢ່າງໃດກໍດີ ກໍຍັງມີການຍົນຍວາຍເອົາປຶ້ມ ວິຊາຂອງຕາເວັນຕົກມາຊ່ວຍ ເຊັ່ນ ປຶ້ມຕຳລາເລກ ແລະການວັດແທກຕາດິນ ເພື່ອຂະຫຍາຍຫລັກສູດເກົ່າ ອອກຕື່ມ. ໃນເວລາດຽວກັນ ກໍຕ້ອງມີການຈຳກັດການເຕີບໃຫຍ່ຂອງໂຮງຮຽນສອນດ້ວຍພາສາ ແບບຕາ ເວັນຕົກອ້ອຍຕ້ອຍນັ້ນນຳ. ຄວາມລົ້ມແຫລວໃນແຕ່ລະຝ່າຍເພື່ອເຂົ້າໃຈເຈດຕະນາຂອງກັນແລະກັນ ໄດ້ເຮັດ ໃຫ້ນະໂຍບາຍຫມົດຄວາມຫມາຍໄປ. ຢູ່ໃນ ຫວຽດນາມ (ເຖິງແມ່ນວ່າ ບໍ່ແມ່ນໃນກຳປູເຈຍ ເຊິ່ງລະບົບເດີມ ຍັງຄົງມີຢູ່) ນະໂຍບາຍຕ່າງໆຂອງຝຣັ່ງ ໃນລະຍະຕົ້ນ ກຽວກັບການສຶກສາ ຮວມທັງການປະພຶດປະຕິບັດ ຂອງຈັກກະພັດ ຫງວຽນ ທີ່ໄດ້ຖອນປົດຕຳແໜ່ງ ພະນັກງານສຶກສາແລະ ຂ້າລາຊະການອື່ນໆ ອອກຈາກ

ເຂດປົກຄອງຄວບຄຸມຂອງຝຣັ່ງໂດຍກົງຢູ່ພາກໃຕ້ນັ້ນ ໄດ້ບິ່ງບອກວ່າ ລະບົບການສອບເສັງແບບຈີ໋ນ ເຖິງ ວາລະສຸດທ້າຍແລ້ວ ຢູ່ໂກແຊງຊີ ໃນຊຸມປີ 1860.

ພາຍໃຕ້ແນວຄຶດແຜ່ອຳນາດທາງວັດທະນະທຳ ແລະອີງໃສ່ຄວາມຕ້ອງການເຂົ້າເຖິງສັງຄົມ ໂດຍ ຜ່ານການຮູ້ພາສາທີ່ດີກວ່າຂອງພວກເຂົາເອງ, ໂດຍຜ່ານໂຮງຮຽນລ່າມແປພາສາ ພວກຝຣັ່ງໄດ້ພະຍາ ຍາມສ້າງທັງຄູສອນ ທັງລ່າມແປ ເພື່ອກະຈາຍຄວາມຮູ້ດ້ານພາສາຝຣັ່ງ ຢ່າງຫນ້ອຍກໍແມ່ນລະດັບປະຖົມ ສຶກສາ ຍ້ອນການສຶກສາໃຫ້ແກ່ຄາລະວາດຝຣັ່ງ ມີຢູ່ຢ່າງຈຳກັດ ແລະໃນຂະນະດຽວກັນ ກໍມີການດັດແປງ ນຳໃຊ້ອັກສອນໂຮມັນ ມາໃຊ້ແທນອັນສອນ ໂກກຍໍ ຂອງພາສາຫວຽດນາມ ເຊິ່ງຕໍ່ມາ ການຂຽນດ້ວຍຕົວ ອັກສອນໂຮມັນນີ້ ໄດ້ກາຍມາເປັນ ເຄື່ອງມືສິດສອນຊາວນາຢູ່ໃນຊົນນະບົດ. ຢູ່ຊະວາ ທ່າທີຂອງພວກ ດັດຊ໌ ຕໍ່ການສຶກສາໃນສະຕະວັດທີ 19 ບໍ່ມີຫລັກການໃດໆ ແຕ່ສ່ວນຫລາຍກໍບໍ່ມີເສລີ່ພາບ ແລະເມື່ອມາຮອດຊຸມປີ 1860 ພວກດັດຊ໌ ຈຶ່ງໄດ້ສ້າງນະໂຍບາຍ ການສຶກສາຂຶ້ນຈະແຈ້ງ ໂດຍເນັ້ງແນໃສ່ການສ້າງຖຸ່ນແຖວຂ້າ ລາຊະການ ແລະຜູ້ຊ່ອຍທີ່ມີຄວາມເຫມາະສົມ. ນະໂຍບາຍສ່ວນນຶ່ງ ຕໍ່ຕ້ານວິທີການອັນເຫັນແກ່ປະໂຫຍດ ສ່ວນຕົວທັງຫມົດ ຢູ່ໃນການສຶກສາອັນເຮັດໃຫ້ນະໂຍບາຍດ້ານຈະລິຍະທຳ/ສິນລະທຳ ຕ້ອງຕອບໂຕ້ຄືນ ເມື່ອຕົ້ນສະຕະວັດໃຫມ່ເລີ່ມຂຶ້ນ.

ດັ່ງນັ້ນ ເມື່ອສະຕະວັດໃຫມ່ໄຂຂຶ້ນ ເອກະລັກປະຈຳຂອງທ້ອງຖິ່ນ ໃນຫລັກສູດການສຶກສາແບບ ອານານິຄົມກໍພົ້ນເດັ່ນຂຶ້ນ ອັນໄດ້ເຮັດໃຫ້ຕ້ອງໃຊ້ຄວາມພະຍາຍາມຫລາຍສົມຄວນ ເພື່ອກຳນົດຮູບໂສມ ຂອງສັງຄົມໃຫມ່ ເຊິ່ງກໍໄດ້ພົ້ນໂຜ່ຂຶ້ນຄືກັນ. ໃນຂັ້ນພື້ນຖານ ແມ່ນການສຶກສາດ້ວຍພາສາພື້ນເມືອງ ສຳລັບ ຊົນຊັ້ນຊາວນາໃນຊົນນະບົດ ສ່ວນໃດສ່ວນນຶ່ງ. ເຖິງແມ່ນວ່າ ຢູ່ໃນພະມ້າ ແລະກຳປູເຈຍ ໄດ້ມີໂຮງຮຽນ ແບບນີ້ຢູ່ຫນ້ອຍນຶ່ງ ການສຶກສາໂດຍໃຊ້ພາສາພື້ນເມືອງ ກໍຫາກຍັງແມ່ນສະຖາບັນເກົ່າແກ່ ເປັນຝ່າຍຈັດ ຫາໃຫ້ເປັນສ່ວນໃຫຍ່ຢ່, ພວກມະຫາອຳນາດອານານິຄົມ ຢ່າງຫນ້ອຍ ກໍຍອມຮັບຜິດຊອບຊ່ອຍເຫລືອດ້ານ ເງິນ ເປັນບາງສ່ວນ ຫລື ໂຄງການ ທີ່ລັດຖະບານ ດຳເນີນການເອງໂດຍກົງ. ໃນການຕອບອະທິບາຍ ຄຳວິພາກວິຈານກ່ຽວກັບຈຳນວນເງິນດ້ານຫນ່ອຍດຽວ ເພື່ອຊ່ອຍການສຶກສາດ້ວຍພາສາພື້ນເມືອງ ຢູ່ໃນ ລັດມາລາຢູ ນັ້ນ ພະນັກງານຄົນນຶ່ງ ໄດ້ໃຫ້ຂໍ້ສັງເກດເມື່ອປີ 1908 ວ່າ: "ລັດຖະບານ ບໍ່ເຄີຍຄຶດຫວັງທີ່ຈະ ໃຫ້ເດັກນ້ອຍ ໄດ້ມີຄວາມຮູ້ຜິວໆປາໆ ຫລື ວ່າ ຢ່າງກວ້າງຂວາງແບບໃດແບບນຶ່ງ ອັນທີ່ຈະບໍ່ໄດ້ຊ່ອຍ ຫຍັງພວກເຂົາເລີຍ ຫລື ຊ່ອຍໃຫ້ພວກເຂົາມີຄວາມສຸກຂຶ້ນກວ່າທີ່ພວກເຂົາ ເປັນຢູ່ໃນປັດຈຸບັນ ສຳລັບຄົນ ມາລາຢູ ຄຸນຄ່າອັນຕົ້ນຕໍຂອງການໄດ້ເຂົ້າໂຮງຮຽນ ແມ່ນການໄດ້ສອນໃຫ້ພວກເຂົາ ນັບຖືລະບຽບຄຳສັ່ງ ຟັງຄວາມ ແລະຊື່ກົງຕໍ່ເວລາເທົ່ານັ້ນ". ການອ້າງເຫດຜົນຄ້າຍຄຽງກັນນີ້ ມີຢູ່ແຫ່ງອື່ນໆນຳ ການສຶກສາ ດ້ວຍພາສາພື້ນເມືອງ ມີເຈດຕະນາຢ່າງດຽວ ຄືເຮັດໃຫ້ຊາວນາ ເປັນຊາວນາທີ່ດີສຸດ, ເພື່ອໃຫ້ພວກເຂົາ ປະນີປະນອມຍອມຮັບຊະຕາກຳຂອງຕົນເອງ. ສິ່ງສຳຄັນທີ່ຕ້ອງເຮັດ ແມ່ນການຫລີກເວັ້ນສິ່ງທີ່ເອີ້ນກັນວ່າ "ມີການສຶກສາສູງເກີນໄປ" ເຊິ່ງມີຄວາມຫມາຍວ່າ ດຶງເອົາພວກຊາວນາອອກຈາກຜືນດິນຖິ່ນຫຍ້າ ຂອງ ພວກເຂົາ ແລະກ້າວເຖິງຂັ້ນຮົບກວນທຳລາຍຊີວິດການເປັນຢູ່ຂອງຫມົດບ້ານ ຫລື ບໍ່ກໍຜະຫລິດຊາວບ້ານຜູ້ ບໍ່ພໍໃຈນຳກຽດຕິຍົດທີ່ໄດ້ຮັບມາ ໂດຍການເປັນສີມືແຮງງານໃຫ້ເກີດມີຄວາມໄຝ່ຝັນ ທີ່ບໍ່ອາດໃຫ້ຄວາມເພິ່ງ ພໍໃຈໄດ້ ພາຍໃຕ້ການປົກຄອງຂອງອານານິຄົມ. ຖ້າຫາກວ່າ ນີ້ເປັນຄວາມຈິງແທ້ ຢູ່ໃນເລື່ອງການສຶກສາ ດ້ວຍພາສາພື້ນເມືອງແລ້ວ ມັນກໍຍິ່ງຕ້ອງເປັນຈິງຫລາຍກວ່າອີກຢູ່ໃນການສຶກສາດ້ວຍພາສາຕາເວັນຕົກ. ນັກບໍລິຫານປົກຄອງຊາວມາລາຢູ ບໍ່ໄດ້ຢາກເວົ້າອອກມາດອກວ່າ ການຂະຫຍາຍການສຶກສາດ້ວຍພາສາ ອັງກິດ ແບບໄວວາເກີນໄປ ຄົງຈະນຳເອົາ "ການຍ້າຍຖິ່ນທາງເສດຖະກິດ ແລະ ຄວາມວຸ່ນວາຍທາງ ສັງຄົມ" ມາໃຫ້ ເປັນແນ່ແທ້.

ມີມະຫາອຳນາດອານານິຄົມປະເທດດຽວເທົ່ານັ້ນ ທີ່ບໍ່ເຫັນຜ້ອງນຳຢ່າງແຮງ ຄື ສະຫະລັດອະເມ ລິກາ ຢູ່ ຟິລິບປິນ ໂດຍມີຄວາມຄຶດເຫັນກົງກັນຂ້າມວ່າ ຄວາມສ່ຽງອັນໃຫຍ່ຫລວງກວ່າ ຕໍ່ການເກີດ ຄວາມວຸ່ນວາຍທາງ ສັງຄົມນັ້ນ ແມ່ນຂຶ້ນຢູ່ກັບ "ມວນຊົນ ຈຳນວນຫລວງຫລາຍ ທີ່ບໍ່ຮູ້ເລື່ອງລາວອັນໃດ

ທີ່ຈະຖືກຈູງໄປແບບຫູຫນວກຕາບອດ ໂດຍຜູ້ຄົນຈຳນວນຫນ້ອຍກວ່າຫລາຍເທົ່າຢ່າງງ່າຍດາຍ". ລະຫວ່າງ ປີ 1901 -1902 ມີຄູຄົນອາເມລິກາ ຫລາຍກວ່າພັນຄົນ ຖືກຍົນຂວາຍໄປສອນຢູ່ ຟິລິບປິນ ແລະພໍເຖິງປີ 1920 ກໍມີເດັກນ້ອຍກວ່າລ້ານຄົນ ໄດ້ຮັບການສຶກສາເປັນພາສາອັງກິດໃນທຸກຂັ້ນຮຽນ. ຢູ່ໃນບ່ອນອື່ນໆ ໃນອາຊີຕາເວັນອອກສຽງໃຕ້ ກໍເປັນຕາຫົວເທົ່າໆກັນ ດ້ວຍວ່າການສຶກສາດ້ວຍພາສາພື້ນເມືອງນັ້ນ ຖືກຈຳກັດໄປໃນຕົວ (ມີການຈຳກັດຢ່າງບໍ່ປ່ຽນແປງຕໍ່ການບຳລຸງເຝິກແອບ ຢູ່ໃນສາມ ອາຣ໌ (three R's) ໃນອັດຕາທີ່ຫນ້ອຍກວ່າເລັກນ້ອຍຂອງຊົນຊັ້ນຊາວນາ ຜູ້ໄດ້ຮັບການສຶກສາ, ອັນໄດ້ພາໄປເຖິງຄວາມບໍ່ພໍໃຈຢ່າງແຮງ ໃນຫມູ່ພວກມີການສຶກສາ ດ້ວຍວ່າຖືກແຍກອອກຈາກພວກມີການສຶກສາແບບຕາເວັນຕົກ ຜູ້ໄດ້ຮັບການຕອບແທນ ສູງກວ່າ.

ຢູ່ສູງກວ່າລະດັບ ການສຶກສາດ້ວຍພາສາພື້ນເມືອງ, ພວກນັກບໍລິຫານອານານິຄົມກັບວິສາຫະກິດຕາເວັນຕົກ ນັບມື້ນັບຕ້ອງການຜູ້ຊ່ອຍວຽກທີ່ຜ່ານການເຝິກອົບຮົມ ຫລາຍຍິ່ງໆຂຶ້ນ. ຄວາມກົດດັນຈາກທັງສອງຄ້າຍ ບວກກັບນະໂຍບາຍທີ່ຕັ້ງຢູ່ເຫນືອການຮັບຮູ້ດ້ານຈະລິຍະທຳ ແຫ່ງຄວາມອະຍຸຕິທຳໃນອະດີດ ແລະໂດຍຕັ້ງຢູ່ເທິງຄວາມມຸ່ງຫວັງໃຫມ ເພື່ອສະມາຄົມວັດທະນະທຳ (ເຊັ່ນ ຢູ່ໃນ ຫມູ່ເກາະດອນ ອິດິສ ຂອງດັດຊ໌), ໂດຍເລັ່ງໃສ່ສິ່ງຕ່ໍໄປຫາວັດທນະທຳເລືອກເຟັ້ນ ອັນເຫນືອກວ່າແດ່ແລ້ວ (ດັ່ງທີ່ພວກຝຣັ່ງ ເຮັດຢູ່ ອິນດູຈີນ ແລະບໍ່ເປັນລະບົບເທົ່າໃດຢູ່ບ່ອນອື່ນໆ), ບົນຈິດສຳນຶກແຫ່ງຄວາມໄວ້ເນື້ອເຊື່ອໃຈ ແລະລະບົບຄ້ຳຊູດູແລກັນ (ແບບຢູ່ໃນ ພະມ້າ ແລະ ມາລາຢູ ຂອງ ອັງກິດ) ຫລື ວ່າ ປະຕິບັດຕາມ ຄຳຫມັ້ນສັນຍາ ອັນໂຍະເຍະ ທີ່ວ່າຈະນຳເອົາສະຖາບັນການປົກຄອງແບບປະຊາທິປະໄຕ ມາແທນການຍັດຍູ ການປົກຄອງແບບອານານິຄົມ (ແບບຢູ່ ຟິລິບປິນຂອງອາເມລິກາ) ເພື່ອເຮັດໃຫ້ການສຶກສາ ດ້ວຍພາສາຕາເວັນຕົກ ທະວີປະລິມານຂຶ້ນຈົນພຽງພໍ. ໃນບາງເຂດ ໂດຍສະເພາະ ໃນລັດມາເລ ທັງຫລາຍ ຢູ່ອານາເຂດ ທີ່ບໍ່ໄດ້ປົກຄອງໂດຍກົງ ຜູ້ໄດ້ຮັບຜົນປະໂຫຍດ ສ່ວນຫລາຍແມ່ນພວກຊົນຊັ້ນນຳຮຸ່ນເກົ່າ ທີ່ຍັງຢູ່ຫັ້ນ ຍົກຕົວຢ່າງຢູ່ ຊະວາ ເປັນອັນດັບທຳອິດ. ຢູ່ບ່ອນອື່ນໆໃນບາງຂັ້ນ ພວກທີ່ມີທ່າດີກວ່າທາງສັງຄົມ ແລະ ເສດຖະກິດ ຢູ່ແລ້ວກໍມັກເປັນຜູ້ມີໂອກາດດີກວ່າ ໃນການຮັບການສຶກສາແບບຕາເວັນຕົກ ແລະໂດຍອາໄສການສຶກສານີ້ ມັນເປັນອັນຈະແຈ້ງວ່າ ທ່າດີທຸກຢ່າງໃນອະນາຄົດ ແມ່ນນອນຢູ່ໃນນັ້ນ. ແຕ່ໃນການຕອບສະຫນອງ ຕ່ໍປັດໄຈສອງຢ່າງ ໂດຍສະເພາະ ແບບເປັນໄປເທື່ອລະຂັ້ນນັ້ນ, ຜົນການຈັດລະດັບຂອງມາດຕະຖານວິຊາການທີ່ຫມຸນໃຊ້ຢູ່ເປັນຈຸດໆ ແລະການຈັດສັນໂອກາດເພື່ອການສຶກສາແບບຕາເວັນຕົກ ໃຫ້ມີຢູ່ແຕ່ໃນຕົວເມືອງ ເທົ່ານັ້ນ-ຜົນຮັບກໍເລີຍແຕກຕ່າງຫລາຍແດ່, ແລະຊົນຊັ້ນນຳຮຸ່ນໃຫມ່ທີ່ພົ້ນເດັ່ນຂຶ້ນຕາມລະບົບ ກໍກາຍເປັນກຸ່ມໄຮ້ເອກະພາບທີ່ບໍ່ໄດ້ມາຈາກຊົນຊັ້ນສັງຄົມດຽວ ແລະພົບເອກະລັກຂອງຕົນຢູ່ໃນການມີສິດຜົນປະໂຫຍດ ຮ່ວມຢູ່ໃນອະນາຄົດ ຫລາຍກວ່າມີຄວາມສຳພັນຮ່ວມກັບອະດີດ.

ເມື່ອລະບົບການສຶກສາແບບຕາເວັນຕົກ ຕັ້ງຮາກຖານດີແລ້ວ ກໍເຕີບໃຫຍ່ ຢ່າງສະຫລັບຊັບຊ້ອນ ທັງມີການແບ່ງຂັ້ນຢູ່ພາຍໃນຫລາຍຂຶ້ນນຳ ແລະລະບົບນີ້ ກໍຖືກຍັດຍູ່ໃຫ້ແກ່ຜູ້ຄົນທີ່ຜ່ານການຄັດຈ້ອນຮອບເລືອກ ຫລາຍຄັ້ງຫລາຍຄາວ. ຕົວຢ່າງນຶ່ງທີ່ສະຫລັບຊັບຊ້ອນກວ່າຫມູ່ ແມ່ນຢູ່ ຫວຽດນາມ ເມື່ອສົງຄາມໂລກຄັ້ງທີ່ 1 ສ້ຽງສຸດລົງ (ແລະລຸນຫລັງການທຳລາຍລ້າງຄັ້ງສຸດທ້າຍ ລະບົບການສອບເສັງ ແບບຍົງຈີ້ ຢູ່ພາກເຫນືອພາກກາງ ແລະໃນພາກໃຕ້ ເຊັ່ນດຽວກັນ), ການເຂົ້າເຮັດວຽກໃນລະບົບພົນລະເຮືອນ ບໍ່ພຽງແຕ່ຮຽກຮ້ອງໃຫ້ຜູ້ສຳເລັດການສຶກສາ ດ້ວຍພາສາພື້ນເມືອງ "ຕາມສາຍຂວາງ" ຢູ່ໃນບ້ານ ຕ້ອງມີການສຶກສາສິບປີ "ຕາມສາຍຕັ້ງ" ນຳອີກ ໂດຍຜ່ານການເຝິກອົບຮົມສາມປີຢ່າງເປັນທາງການແບບຝຣັ່ງ. ຕໍ່ມາມີນັກສຶກສາຈຳນວນຫຍິບມືດຽວ ຈຳຕ້ອງໄປຮຽນ ລະບົບການສຶກສາຝຣັ່ງ ຢູ່ຕ່າງປະເທດ ຫລື ບໍ່ກໍໄປທີ່ມະຫາວິທະຍາໄລຮາໂນຍ ບ່ອນທີ່ມີໂຮງຮຽນວິຊາສະເພາະໄວ້ເຝິກສອນຕື່ມ ໃນເລື່ອງການບໍລິການສາທາລະນະ ໃຫ້ແກ່ນັກຮຽນທີ່ມາຈາກທົ່ວອິນດູຈີນ. ນັກສຶກສາຊະວາ ຜູ້ຮຽນເກັ່ງ ຫລື ໂຊກດີ ກໍປະຕິບັດຕາມຮູບແບບຄ້າຍຄືດຽວນີ້ ມີຫລາຍຄົນຮຽນສຳເລັດ ດ້ານວິສະວະກຳ ກົດຫມາຍ ຫລື ໂຮງຮຽນການ ແພດ ທີ່ຕັ້ງຂຶ້ນລະຫວ່າງປີ 1919 ຫາ 1926. ໃນແຕ່ລະຂັ້ນຕອນຂອງບັ້ນດຳເນີນການນີ້ ກໍມີຫລາຍຄົນ ທີ່ຕົກຮ່ຽ

ໄປກາງທາງ ແລະບໍ່ວ່າແມ່ນກໍລະນີໃດກໍຕາມ, ຈຳນວນນັກສຶກສາທີ່ໄດ້ຮຽນນັ້ນ ແມ່ນມີຫນ້ອຍຫລາຍ (ແລະ ຍິ່ງຫນ້ອຍກວ່າຫລາຍ ຖ້າຄຶດໄລ່ໃສ່ຈຳນວນປະຊາຊົນທັງຫມົດ) ປະມານປີ 1937 ປະຊາກອນໃນອິນດູຈີນ ມີ ລະຫວ່າງ 23 ລ້ານຄົນ ແຕ່ທົ່ວອິນດູຈີນ ມີເດັກນ້ອຍໄວຮຽນໄດ້ຮັບການສຶກສາແຕ່ 500,000 ຄົນ ແລະໃນນີ້ ສ່ວນຫລວງຫລາຍພວກເຂົາກໍພວມຮຽນຢູ່ຊັ້ນປໍ1 ປໍ2ເທົ່ານັ້ນ, ມີນັກສຶກສາໃນມະຫາວິທະຍາໄລ ແຕ່ ປະມານ 600 ຄົນ ຢູ່ໃນອິນດີສ ເນເທີແລນ ເຊິ່ງມີປະຊາກອນ 68 ລ້ານຄົນ ເດັກນ້ອຍອິໂດເນເຊຍ 93,000 ຄົນ ໄດ້ຮັບການສຶກສາດ້ວຍພາສາດັດຊ໌ ສ່ວນໃຫຍ່ ຢູ່ໃນໂຮງຮຽນປະຖົມ ແລະນັກສຶກສາລະດັບມະຫາວິທະ ຍາໄລ ກໍມີພຽງ 496 ຄົນ, ເຖິງແມ່ນວ່າ ຕົວເລກໃນອິນໂດເນເຊຍ ອາດຈະເປັນຕົວເລກຕ່ຳສຸດ ໃນພາກພື້ນ ອາຊີຕາເວັນອອກສຽງໃຕ້ ແຕ່ອັດຕາທົ່ວໆໄປກໍຫາກຢູ່ໃນລະດັບໃກ້ຄຽງນີ້ ຍົກເວັ້ນຢູ່ໃນສອງແຫ່ງສຳຄັນ ທີ່ເປັນກໍລະນີພິເສດ ຄືໃນ ຟີລິບປິນ ກັບ ສະຫຍາມ. ຢູ່ຟີລິບປິນ ການສຶກສາດ້ວຍພາສາອັງກິດ ໄດ້ຮັບການ ສົ່ງເສີມຢ່າງຟົດຟື້ນມາຕັ້ງແຕ່ຕົ້ນສະຕະວັດ ມາຮອດປີ 1938 ມີນັກຮຽນຫລາຍກວ່າສອງລ້ານຄົນ ເຂົ້າ ຮຽນຢູ່ທຸກລະດັບ ແລະມີນັກສຶກສາລະດັບມະຫາວິທະຍາໄລເຖິງ 7,000 ຄົນ ຮຽນຢູ່ພາຍ ໃນປະເທດ. ຢູ່ສະຫຍາມ ການສຶກສາດ້ວຍພາສາພື້ນເມືອງ ກໍບໍ່ໄດ້ນ້ອຍຫນ້າ ຫລື ມີຂໍ້ຈຳກັດ ຄືດັ່ງຢູ່ບ່ອນອື່ນ, ມາຮອດ ຊຸມກາງປີ 1930 ມີນັກຮຽນໄທ ຢູ່ລະດັບ ມັດທະຍົມປະມານ 45,000 ຄົນ ຕໍ່ຈຳ ນວນພົນລະເມືອງ 14 ລ້ານ ຄົນ ແລະມີນັກສຶກສາມະຫາວິທະຍາໄລ ເຖິງ 800 ຫລື ອາດຫລາຍກວ່ານັ້ນ ຢູ່ພາຍໃນປະເທດ. ທັງໃນ ຟີລິບປິນ ແລະສະຫຍາມ ມີນັກສຶກສາຫລາຍຄົນໄປຮຽນຕໍ່ທີ່ຕ່າງປະເທດ ຫລາຍກວ່າປະເທດອື່ນໆ ໃນອາຊີ ຕາເວັນອອກສຽງໃຕ້.

ການສຶກສາພາຍນອກສັງຄົມອານານິຄົມ ເຖິງແມ່ນວ່າ ມີຄວາມຕັ້ງໃຈພຽງແຕ່ ໃຫ້ເປັນການຂະ ຫຍາຍຂັ້ນໄດທາງການສຶກສາ ດັ່ງໄດ້ພັນລະນາມາແລ້ວ ກໍຫາກເປັນປະສົບການທາງການສຶກສາຢ່າງນຶ່ງ ສຳລັບຜູ້ໄດ້ຮ່ຳຮຽນຈຳນວນດ້ວມເລັກນ້ອຍ ເບິ່ງໃນດ້ານຄຸນນະພາບ ມີຄວາມແຕກຕ່າງຫລາຍ ເຊິ່ງເລື່ອງ ນີ້ສົມຄວນ ເວົ້າເຖິງອີກຕ່າງຫາກ. ບາງທີ ສິ່ງທຳອິດທີ່ການສຶກສາໃນເມືອງຫລວງໄດ້ເຮັດໄປ ແມ່ນການ ຕັດທອນ ອຳນາດ ຂອງອານານິຄົມແລະພວກຕາເວັນຕົກ ໃຫ້ຫນ້ອຍລົງ. ສຳລັບຊາວອິນໂດເນເຊຍ ເວົ້າ ໄດ້ວ່າ ມີຜົນສະທ້ອນຢ່າງແທ້ຈິງ. ຫລາຍຄົນຕ່າງບັນທຶກຄວາມແປກໃຈ ກັບ ຄວາມບໍ່ຢາກເຊື່ອຂອງພວກ ຕົນໄວ້ເມື່ອພົບວ່າ ໂຮນລັງ ທີ່ເປັນປະເທດນ້ອຍໆປະເທດນຶ່ງ ແຕ່ຖືກວາດພາບວ່າເປັນປະເທດກວ້າງໃຫຍ ໄພສານ ປາກົດອອກໃນປຶ້ມຮຽນດ້ວຍມາດຕາສ່ວນແຜນທີ່ຂະຫນາດໃຫຍ່ຫລາຍ ຈົນພວກເຂົາສາມາດສຶກ ສາກ້ອນຫີນທຸກກ້ອນ ແລະຫ້ວຍນ້ຳທຸກໆສາຍຂອງມັນ. ຍິ່ງໄປກວ່ານີ້ ຍັງເປັນປະສົບການທີ່ເປັນ ເອກະ ລາດຢ່າງນຶ່ງ ທີ່ຕ້ອງໄດ້ປະເຊີນຫນ້ານຳ ໃນຖານະເປັນມະນຸດຜູ້ນຶ່ງ ແຕ່ບໍ່ແມ່ນໃນຖານະເປັນສະມາຊິກທີ່ "ໄດ້ວິວັດ" ມາຈາກປະຊາຊາດຜູ້ຕ່ຳຕ້ອຍກວ່າ. ແມ່ນແຕ່ ເມື່ອໃຫ້ຄົນອິນເດື່ອງອັງກິດ ຍົກເດື່ອງໃຫ້ໃຜຜູ້ນຶ່ງ ກໍຕ້ອງສຶກສາແລະຮຽນຮູ້ເອງວ່າ ທຳອິດນັ້ນ ກະໂຕສັງຄົມຕາເວັນຕົກເອງກໍມີການແບ່ງຊັ້ນວັນນະ ຢ່າງລະ ອຽດ ແລະ ໃນທີ່ສຸດ ນັກສຶກສາຫລາຍຄົນ ກໍໄດ້ພົບພໍ້ກັບຄົນຕາເວັນຕົກ ທີ່ບໍ່ຕຳນິລະບຽບສັງຄົມທີ່ມີຢູ່ ຂອງ ປະເທດຕົນ ແຕ່ກໍຕອບໂຕ້ຢັດແຍ່ງຢ່າງຮຸນແຮງ ກັບການຄອບຄອງອານານິຄົມ ແລະຊີ້ບອກທິດສະດີ ການຂູດຮີດທາງເສດຖະກິດ ເຊິ່ງທັງສອງຢ່າງ ໄດ້ອະທິບາຍ ແລະທັງໄດ້ຄາດຄະເນຈຸດສຸດທ້າຍຂອງ ທິດສະດີນີ້. ນັກສຶກສາໃນຕ່າງປະເທດກັບຄືນມາອາຊີຕາເວັນອອກສຽງໃຕ້ ບໍ່ພຽງແຕ່ເຂົ້າມາຮັບຕຳແຫນ່ງ ສູງກວ່າຢູ່ໃນລະບົບລາຊະການທ້ອງຖິ່ນ ຕາມຂະແຫນງການສາທາລະນະເທົ່ານັ້ນ ແຕ່ຫາກສະເຫນີຕົວ ເປັນຜູ້ນຳຊາດນິຍົມໃນການຕໍ່ສູ້ ເພື່ອເອກະລາດ.

ສຳລັບສັງຄົມມຸດສະລິມ ໃນອາຊີຕາເວັນອອກສຽງໃຕ້ (ຄືກັບກັບບ່ອນອື່ນໆ ຍົກເວັ້ນ ໃນສະຫຍາມ) ເຊິ່ງເປັນບ່ອນທີ່ເສັ້ນທາງລາຊະການທີ່ອາໄສແຕ່ ການສຶກສາດ້ວຍພາສາພື້ນເມືອງອ້ອຍຕ້ອຍນັ້ນ ຖືກສະ ກັດກັ້ນຢູ່ຈຸດນຶ່ງ ຊຶ່ງບໍ່ໄກຈາກແຫລ່ງກຳເນີດຂອງມັນຕາມລ່ອງສາຍນ້ຳ,- ຢູ່ບ່ອນນັ້ນ ຄວາມຫວັງອັນສູງ ສຸດຂອງຄົນຜູ້ນຶ່ງ ກໍແມ່ນຕຳແຫນ່ງຄູສອນເງິນເດືອນດ້ວມຫນ້ອຍ ໃນລະບົບດຽວກັນ ຫລື ຊີວິດພະເນຈອນ ຂອງນັກຫນັງສືພິມ-ມືປະຕູໄຂກວ້າງ ຢູ່ຕາມລ່ອງແມ່ນ້ຳ ໄປສູ່ໂລກກວ້າງພາຍນອກ ຄືໂອກາດທີ່ໄຂໃຫ້ແກ່

ຄົນຊັ້ນສູງຊາວຕາເວັນຕົກກຸ່ມນຶ່ງ. ຍ້ອນວ່າ ການປັບປຸງຢ່າງໃຫຍ່ຫລວງ ໃນດ້ານການຄົມມະນາຄົມ ກັບ ຕາເວັນອອກກາງ (ເຊິ່ງໃນ ອີກທັດສະນະນຶ່ງຈະຖືວ່າແມ່ນຕາເວັນຕົກ ກໍໄດ້) ເມື່ອສຸດສະຕະວັດທີ 19 ປະຊາ ຊົນຈຳນວນຫລາຍຈາກເຂດ ອີສອິນດີສ ຂອງດັດຊ໌ ແລະມາລາຢູ ສາມາດເດີນ ທາງໄປສະແຫວງ ບຸນ ຢູ່ເມືອງ ເມກະ. ເຖິງແມ່ນວ່າພວກສະແຫວງບຸນສ່ວນຫລາຍ ຈະຢູ່ທີ່ນັ້ນພຽງ 2-3 ອາທິດ ແຕ່ລາຍໄດ້ເປັນ ເງິນສົດທີ່ສູງຂຶ້ນ ຈາກການມີສ່ວນເປັນຜູ້ຖືຫຸ້ນຂະໜາດນ້ອຍ ໃນເສດຖະກິດສິ່ງອອກ ໄດ້ເຮັດໃຫ້ຫລາຍຄົນ ສາມາດຢູ່ໃນເມືອງເມກະ ຫລື ກຸງໄຄໂຣ ຕໍ່ໄປໄດ້ອີກດົນກວ່າ ໃນອະດີດ ເປັນເວລາຫລາຍປີ ໃນຂັ້ນຕົ້ນ ກໍ ແມ່ນເພື່ອສຶກສາຮ່ຳຮຽນ ເລື່ອງສາສະໜາເປັນຕົ້ນຕໍ. ທ່າດີຂອງກຸງໄຄໂຣ ດັ່ງທີ່ອ້າຍບ່າວຜູ້ນຶ່ງໄດ້ເວົ້າໄວ້ ຢູ່ບ່ອນຫັ້ນ ຜູ້ໃດກໍສາມາດສຶກສາເລື່ອງການເມືອງໄດ້ນຳ. ໃນຂະນະທີ່ໂລກອາຫລັບ ພວມເຫີ່ອອນຊອນນຳ ເລື່ອງສະຕິປັນຍາ ແລະການເມືອງ-ສຸມໃສ່ທັງການຟື້ນຟູບູລະນະອິດສະລາມ ແລະການຕໍ່ສູ້ແບບຊາດນິຍົມ ເພື່ອເປັນອິດສະລະຈາກຕາເວັນຕົກນັ້ນ ພວກນັກສຶກສາຈາກອິນໂດເນເຊຍ ແລະມາລະຢູ ໄດ້ຮຽນຮູ້ພາສາ ໃໝ່ ແລະເກີດມີແນວຄຶດໃໝ່ ເພື່ອນຳໃຊ້ຕໍ່ຕ້ານກັບອຳນາດອານານິຄົມ ທີ່ຄອບງຳສັງຄົມຂອງພວກເຂົາ ແລະກຳນົດສະຖານະອັນດ້ອຍກວ່າຂອງພວກເຂົາໄວ້ ໃນສັງຄົມນັ້ນ.

ພວກປັນຍາຊົນທີ່ຢູ່ໃນເມືອງ ສະໄໝກາງຊຸມປີ 1920 ມີສະມາຄົມອາສາສະໝັກຈຳນວນຫລວງ ຫລາຍ ດັ່ງໄດ້ກ່າວມາແລ້ວ ໄວ້ເປັນນາວາສຳລັບການຕໍ່ສູ້ ແລະເປັນເຄື່ອງມືຂອງຄວາມໂກດແຄ້ນຂອງ ພວກຕົນ ເມື່ອຍຸຕິການເຄື່ອນໄຫວ ກໍກາຍເປັນພັກການເມືອງຊາດນິຍົມຫ້າວຫັນ ຢູ່ໃນພະມ້າ, ອິນດີສ ເນເທີ ແລນ, ແລະໃນຫວຽດນາມ, ເປັນການເຄື່ອນໄຫວທີ່ພວມຕັ້ງຕົ້ນໃໝ່ ແບບດຽວກັນກັບຢູ່ໃນບ່ອນອື່ນ, ພວກ ປັນຍາຊົນເຫລົ່ານັ້ນ ມີຄວາມເວົ້າຂຽນໄວ້ນຳ ແລະເຖິງແມ່ນວ່າ ບາງຄົນໄດ້ອອກແຮງຢ່າງຫນັກໜ່ວງ ເພື່ອດູດຊຶບເອົາພາສາກັບ ວັດທະນະທຳຕາເວັນຕົກກໍຕາມ ມັນກໍເປັນທາງອອກອັນສຸດທ້າຍ ສຳລັບພວກ ເຂົາເອງ ແລະຜູ້ທີ່ຮຽນມາທາງພາສາພື້ນເມືອງ. ພາສາມີຄວາມສຳພັນໃກ້ຊິດເປັນພິເສດກັບເອກະລັກ ທາງວັດທະນະທຳ ຄື ທັງສອງ ຕ່າງກໍເປັນພາຫະນະທີ່ສະແດງອອກໄດ້ຫລາຍທີ່ສຸດ ສຳລັບຄວາມເຊື່ອຖື ຄວາມນິຍົມ ແລະຄວາມຮູ້ສຶກຂອງສັງຄົມ ອັນເປັນຈິດວິນຍານລ້ຳເລິກສຸດຂອງສັງຄົມ ແລະທັງກໍເປັນພາ ຫະນະນຶ່ງ ສຳລັບການຮັບຮູ້ຕົນເອງ. ຜົນງານຂອງຕົ້ນສະຕະວັດທີ 20 ເຊິ່ງໄດ້ກຳເນີດຂອງຂະບວນການ ຊາດນິຍົມເພື່ອຕໍ່ຕ້ານອານານິຄົມ ໄດ້ຫລໍ່ຫລອມເຂົ້າກັນທຳອິດແລະຕໍ່ໆມາ ສຳຄັນກວ່າໝູ່ ແມ່ນປັ່ນປ້ອນ ຄວາມຫວັ່ນວິຕົກ ໃນເລື່ອງພາສາຂອງປະຊາຊົນ ຫລື ແມ່ນແຕ່ໃນບ່ອນທີ່ບໍ່ມີພາສານຶ່ງພາສາດຽວ ໃນ ບ່ອນທີ່ຕ້ອງຍອມຮັບເອົາພາສາໃດພາສານຶ່ງ ເປັນສັນຍະລັກ ແລະຕົວແທນຂອງຄວາມເປັນເອກະພາບໃນ ການປະເຊີນໜ້າ ກັບ ວັດທະນະທຳ ແລະການເມືອງຂອງລັດທິຈັກກະພັດນິຍົມ.

ໃນມາເລເຊຍ ວັດຈະນານຸກົມເຫລັ້ມທຳອິດ ຂຽນຂຶ້ນໂດຍ ຄົນມາເລ ຊື່ ຣາຊາ ອາລີ ບາຣາຊາ (rajia Haji Ali's Kitab Pengetahuan Bahasa) ມີຊື່ວ່າ ກິຕັບ ເປັນເກຕາຣອບ ໄດ້ລິດຈະນາອອກ ເມື່ອ ປາຍຊຸມປີ 1850 ນັ້ນ ແລະຍັງບໍ່ໄດ້ຈັດພິມອອກຈົນຮອດປີ 1928. ວັດຈະນານຸກົມອີກເຫລັ້ມນຶ່ງ ຊື່ ວັດຈະ ນານຸກົມ ໂຈນໂຊນຽນ (Johnsonian Dictionnary) ໃນປຶ້ມຫົວນີ້ ນິຍາມຂອງຄຳບາງຄຳ ໄດ້ຈົ່ງບ່ອນໄວ້ ໃຫ້ວິພາກວິຈານໄດ້, ມີການເວົ້າເຖິງຮູບແບບການດຳລົງຊີວິດ ແລະພາສາມາເລ ທີ່ພວມປ່ຽນໄປພາຍໃຕ້ ຜົນສະທ້ອນຂອງຊາດຕາເວັນຕົກ. ນຶ່ງໃນບັນດາສະມາຄົມເກົ່າແກ່ທີ່ສຸດ ກ່ຽວກັບສະຫວັດດິການ- ວັດທະ ນະທຳ ກໍ່ຕັ້ງຂຶ້ນໃນລັດ ຍະໂຮຣ໌ (Jahore) ເມື່ອປີ 1888 ເພື່ອພັດທະນາພາສາມາເລ ໃຫ້ທັນສະໄໝ ແລະ ໃຫ້ເປັນພາຫະນະເອກະລາດ ສຳລັບລະບົບການປົກຄອງສະໄໝໃໝ່. ໃນຫວຽດນາມໃຕ້ ວັດຈະນານຸກົມ ພາສາຫວຽດນາມສອງເຫຼັ້ມ ຂອງ ຮວນ ຕິນຫ໌ ຄົວ (Huynh Tinh Cua's) ພິມອອກປີ 1896 ປັບປຸງ ຄວາມຫມາຍຂອງຄຳ ໃຫ້ໄດ້ມາດຕະຖານຕາມຄວາມນິຍົມ ທີ່ເລັ່ງໃສ່ຊຸກຍູ້ໃຫ້ການຊົມໃຊ້ພາສາຢ່າງເປັນ ເອກະພາບກັນໃນທົ່ວປະເທດ, ຕໍ່ມາ ບັນຫາພາສາກໍມີທ່າທີວ່າ ຈະໄຫຼຂ້ອນກັນຢູ່ໃນໂຮງຮຽນ ເຊິ່ງເປັນສະ ຖານທີ່ ເຊິ່ງຝຣັ່ງຜູ້ທຳການຮຸກຮານທາງວັດທະນະທຳໄດ້ລົງໂທດ ແມ່ນແຕ່ຜູ້ໃຊ້ພາສາ ຫວຽດນາມແບບ ຊາວບ້ານ ໃນສະຖາບັນການສຶກສາລະດັບສູງ.

ຢູ່ໃນອິນດີສ ເນເທີແລນ ພວກດັດຊ໌ ໃຊ້ພາສາມາເລ ເປັນພາສາສຳລັບການປົກຄອງຊາວພື້ນ ເມືອງ" ມາຕັ້ງແຕ່ສະຕະວັດ ທີ 19 ແລະໃນທາງກົງກັນຂ້າມກັບຝຣັ່ງ, ພວກດັດຊ໌ ບໍ່ສົ່ງເສີມຈົນເຖິງຂັ້ນ ເກືອດຫ້າມຊາວພື້ນເມືອງຂ້າລາຊະການ ໃຊ້ພາສາດັດຊ໌. ທ່າທີດັ່ງກ່າວ ບວກກັບການໃຊ້ພາສາເກືອບ ວ່າ ໂດຍທົ່ວໆໄປຢູ່ໃນຫນ້າທນັງສືພິມ ແລະການດຳລົງຊີວິດ ພາຍໃນການຈັດຕັ້ງ ເມື່ອຕົ້ນສະຕະວັດທີຊາວ ໄດ້ ຊ່ວຍພັດທະນາມາເລ ໃຫ້ທັນສະໄຫມ ແລະປ້ອງກັນບໍ່ໃຫ້ຖືກກືນກິນ ແລະກາຍເປັນພາສາປະສົມຂອງ ແຫລມມາເລ ມາຫລາຍສະຕະວັດ ແລະໃນທີ່ສຸດ ກໍພາມາເຖິງການຮັບເອົາພາສານີ້ ມາເປັນພາສາແຫ່ງ ຊາດ ໃນຊຸມປີ 1920 ແລະຫລັງຈາກນັ້ນກໍໄດ້ຊື່ວ່າ ພາສາອິນໂດເນເຊຍ. ຢູ່ຟີລິບປິນ ນະໂຍບາຍການສຶກ ສາມະຫາຊົນໃນສະໄຫມການປົກຄອງຂອງອາເມລິກາ ໄດ້ອອກແຮງຢ່າງຫນັກເພື່ອກະຈາຍຄວາມຮູ້ດ້ານ ພາສາອັງກິດ, ພວກຊາດນິຍົມ ເກີດຄວາມຮູ້ສຶກປາຖະຫນາທີ່ຈະມີພາສາພື້ນເມືອງພາສານຶ່ງເປັນພາສາ ແຫ່ງຊາດ ແລະໃນທີ່ສຸດກໍໄດ້ຕັ້ງສະຖາບັນພາສາແຫ່ງຊາດຂຶ້ນໃນປີ 1936 ແລະຕໍ່ມາກໍຮັບ ເອົາພາສາ ຟີລິບປິນໂນ ເປັນພາສາແຫ່ງຊາດ ໂດຍອາໄສພາສາຕາກາລັອກ ທີ່ອີງໃສ່ພາສາ ມານິລາ ເປັນຫລັກ ຖ້າມກາງທາງເລືອກອື່ນໆ. ແມ່ນແຕ່ຢູ່ສະຫຍາມ ຄວາມກົວຢ້ານກ່ຽວກັບຄວາມບໍລິສຸດ ຂອງພາສາກໍສະ ແດງຕົວອອກມາ ຈຶ່ງໄດ້ມີການແຕ່ງຕັ້ງຄະນະກຳມາທິການພິເສດຊຸດນຶ່ງ ຊຶ່ງຕໍ່ມາເອີ້ນວ່າ ລາຊະບັນດິດ ສະພາແຫ່ງປະເທດໄທ ເພື່ອຮັກສາພາສາໄທ ໃຫ້ຄົງຢູ່ຕະຫລອດໄປ.

ການໃຊ້ຄວາມພະຍາຍາມຢ່າງຫລວງຫລາຍ ເພື່ອການເຕີບໃຫຍ່ຂອງພາສາຂອງຊາດ ຖືກສະ ແດງອອກຢູ່ໃນຫນ້າທນັງສືພິມພາສາພື້ນເມືອງ ເຊິ່ງໃນທົ່ວທຸກແຫ່ງ ຂອງອາຊີຕາເວັນອອກສຽງໃຕ້ ໄດ້ມີ ບົດບາດ ນັບມື້ນັບສຳຄັນຂຶ້ນ ຢູ່ໃນຊີວິດວັດທະນະທຳ ແລະການເມືອງ. ບໍ່ມີສື່ ຫລືການສະແດງອອກດ້ານ ອື່ນໃດກ່ຽວ ກັບການປ່ຽນແປງດ້ານສັງຄົມທີ່ຈະຫາໄດ້ງ່າຍໆ ເພື່ອການສຶກສາ, ຊຸດເອກະສານ ຫນັງສືພິມ ເກົ່າແກ ແລະວາລະສານປະກອບເປັນຄັງສາງອັນຫາຄ່າບໍ່ໄດ້ ຂອງປະຫວັດສາດພາຍໃນ ໃນຍຸກສະໄຫມນັ້ນ. ຫນັງສືພິມ ສະບັບທຳອິດ ທີ່ພາສາພື້ນເມືອງ ມັກແປມາຈາກຫນັງສືພິມພາສາຕ່າງປະເທດເກືອບທັງຫມົດ ຫລື ບໍ່ກໍ ບາງສ່ວນ ເຖິງແນວໃດກໍດີ ພໍມາຮອດຊຸມປີ 1890 ແລະໃນສະຕະວັດທີ20 ຢູ່ໃນເມືອງໃຫຍ່ໆ ເກືອບທຸກ ເມືອງ ກໍມີຫນັງສືພິມພາສາພື້ນເມືອງ ຢ່າງຫນ້ອຍນຶ່ງສະບັບ ພິມອອກຈຳຫນ່າຍເປັນປົກກະຕິ ແລະມີຫນັງສືພິມລາຍອາທິດ ແລະລາຍເດືອນອີກຈຳນວນນຶ່ງ ສ່ວນຫລາຍ ແມ່ນຫມາກຜົນຂອງສະມາ ຄົມອາ ສາສະຫມັກໃຫມ່ ພ້ອມໆກັບຈຳນວນຜູ້ອ່ານອອກຂຽນໄດ້ຫລາຍຂຶ້ນ ເຊິ່ງເປັນເລື່ອງທີ່ເກີດຂຶ້ນ ໂດຍ ທົ່ວໄປ ຢູ່ໃນອາຊີຕາເວັນອອກສຽງໃຕ້, ເຖິງແມ່ນວ່າ ມີຄວາມບໍ່ເພິ່ງພໍໃຈໃນຫລັກສູດການສຶກສາຢູ່ກໍຕາມ ຫນັງສືພິມ ກໍເກີດມີອິດທິພົນສຳຄັນໃນການເຜີຍແຜ່ ແລະການສົນທະນາກັນກ່ຽວກັບແນວຄຶດໃຫມ, ການ ສ້າງຮູບ ໂສມຂອງຊົນຊັ້ນປັນຍາຊົນ ແລະການເຝິກຝົນຫລໍ່ຫລອມ ຜູ້ເປັນຫົວຫນ້າຂອງພວກເຂົາ ພ້ອມທັງ ການຂະຫຍາຍອິດທິພົນຂອງພວກເຂົາອອກໄປ. ຢູ່ໃນບ້ານນຶ່ງທີ່ມີຮ້ານ ກາເຟ ຫລື ໂຮງນ້ຳຊາດ້ວມຫນ້ອຍ ກໍໄດ້ຮັບຫນັງສືພິມເປັນບາງຄັ້ງບາງຄາວ, ຫນັງສືເຫລ່ານີ້ອາດນຳໄປອ່ານໃຫ້ຜູ້ບໍ່ຮູ້ຫນັງສືຟັງໄດ້ແລ້ວ ກໍມັກ ເກີດການຖົກຖຽງກັນຂຶ້ນ ໂດຍນັກການເມືອງມືໃຫມ່. ໃນປີ1906 ຫນັງສືພິມ ພາສາມາເລ ທີ່ຖືວ່າສຳຄັນ ທີ່ສຸດສະບັບນຶ່ງໃນຍຸກຕົ້ນໆ ໄດ້ຂຶ້ນບັນຊີວ່າ ມີຫນັງສືພິມຕ່າງໆຢູ່ບໍ່ຫນ້ອຍກວ່າ 26 ສະບັບ ເຊິ່ງໃນນັ້ນ ບາງ ສະບັບ ໄດ້ຮັບການຂະຫນານນາມວ່າເປັນ "ແສງສະຫວ່າງແຫ່ງຊີວິດ, ເປັນຜ້າຍັນສັກຄວາມນຶກຄຶດ, ເປັນ ກະຈົກສະທ້ອນເຫດການ, ເປັນແຫລ້ງຮັບໃຊ້ແຫ່ງສະຕິປັນຍາ, ເປັນຜູ້ບອກເຕືອນສຳລັບຄົນຂີ້ລືມ, ເປັນຜູ້ຊີ້ ທາງສຳລັບຜູ້ຫລົງທາງ, ເປັນໄມ້ເທົ້າສຳລັບຜູ້ອ່ອນແອ, ເປັນຜູ້ປົກປ້ອງຊຸມຊົນ ແລະເປັນເວທີຊຸມນຸມສຳລັບ ການສົນທະນາທຸກປະເພດ. ເມື່ອຕົກຢູ່ໃນມືຂອງຜູ້ນຳຮຸ່ນໃຫມ່ ຄຳເວົ້າເຫລ່ານີ້ ກໍບໍ່ໄດ້ເປັນຄຳເວົ້າໂຍກເກີນ ໄປແຕ່ຢ່າງໃດ.

# ບົດທີ 25 ປະເທດ ຟິລິບປິນ

ລັດທິຊາດນິຍົມສໄຫມໃຫມ່ ປາກົດໂຕ ເປັນຄັ້ງແຮກໃນປະເທດຟິລິບປິນ. ສະເປນໄດ້ຕອບໂຕ້ບາດກ້າວ ແຫ່ງການປ່ຽນແປງອັນນັບມື້ນັບຫລາຍຂຶ້ນນີ້ ດ້ວຍການປາບປາມ, ດຳເນີນຕາມນະໂຍບາຍ ເຊິ່ງຊາວສະເປນ ເຫັນວ່າເປັນຫນ້າສົງໄສ ແລະບໍ່ທັນຈະແຈ້ງ ແຕ່ກໍຍັງມີປະໂຫຍດສຳລັບຮັກສາ ອານານິຄົມໄວ້. ຄວາມບໍ່ມີສະຖຽລະພາບ ທີ່ຊຳເຮື້ອມາດົນ ໃນສະເປນ ແລະຄວາມອ່ອນແອ ໃນທາງການເມືອງ ເສດຖະກິດ ແລະການທະຫານໃນຟິລິບປິນ ກໍ່ໃຫ້ເກີດຄວາມລັ່ງເລໃຈໃນການຕັດສິນໃຈ ເຊິ່ງສະເປນ ຫວັງວ່າຈະເຊື່ອງອຳໄວ້ ດ້ວຍຄວາມແນບນຽນ. ຄວາມຮູ້ສຶກຂອງນັກຊາດນິຍົມ ພົບຈຸດສຸມ ໃນປີ 1872 ອັນເປັນຜົນມາຈາກການປາບປາມຂອງສະເປນ. ພວກປັນຍາຊົນທ້ອງຖິ່ນ ຫລື ອິລຸຍສຕຣາໂດ (illustrados) ຕິຕຽນພວກພຣະປະຈຳເຂດ ຕາມຄວາມຊົ່ວຮ້າຍຂອງລະບົບອານານິຄົມ ຂອງສະເປນ, ຍ້ອນວ່າ ພຣະປະຈຳທ້ອງຖິ່ນ ເປັນພາກສ່ວນທີ່ເຫັນໄດ້ຄັກກວ່າໝູ່ ຫົວຮີດເດີມທີ່ສຸດ ມີຄວາມສາມາດທີ່ສຸດ ແລະຢູ່ຢ່າງຖາວອນທີ່ສຸດ ໃນຊຸມຊົນສະເປນ. ໃນລະຫວ່າງ 25 ປີສຸດທ້າຍ ຂອງສະຕະວັດທີ 19 ຄວາມພ້ອມດ້ານ ຊັບສົມບັດ ຄວາມຕື່ນຕົວ ການສຶກສາ ແລະຄວາມພໍໃຈໃນຫມູ່ພວກປັນຍາຊົນທ້ອງຖິ່ນເຫລົ່ານັ້ນ ໄດ້ນຳພາພວກເຂົາໄປສູ່ການຂັດແຍ່ງໂດຍກົງກັບ ອຳນາດການປົກຄອງສະເປນ.

ການສະແດງອອກເທື່ອທຳອິດ ຂອງລັດທິຊາດນິຍົມ ຟິລິບປິນ ເກີດຂຶ້ນ ບໍ່ແມ່ນໃນກະໂຕດອນ ຟິລິບປິນ ເອງ ເພາະໃນນັ້ນມີການກວດກາຂ່າວສານຢ່າງເຂັ້ມງວດ ແຕ່ແມ່ນເກີດຂຶ້ນຢູ່ສະເປນ. ຫລັງຈາກການຂັດຂືນຄຳສັ່ງຢຸ ເຄວິຕ ອາຣເຊນາ ປີ 1872 ພວກປັນຍາຊົນທ້ອງຖິ່ນຫລາຍຄົນຖືກຈັບກຸມ, ພາຍຫລັງມາ ພວກເຂົາ ຫລືວ່າລູກຊາຍຂອງພວກເຂົາ ໄດ້ຫລົບຫນີການປາບປາມໄປຕ່າງປະເທດ ແລະ ເພື່ອຍົກລະດັບການສຶກສາຂຶ້ນ.

ພວກຟິລິບປິນອົບພະຍົບ ໄດ້ຈັດຕັ້ງກັນຂຶ້ນເປັນ ຂະບວນການຕໍ່ຕ້ານການໂຄສະນາຊວນເຊື່ອ. ດ້ວຍວິທີການເຄື່ອນໄຫວແບບສຸຂະທັດ ແລະມີວິວັດທະນາການ ຂະເຈົ້າໄດ້ອຸທິດເພື່ອຄວາມສະເຫມີພາບຂອງຊາວຟິລິບປິນ, ເຮັດໃຫ້ມີຕົວແທນຢູ່ສານຕັດສິນໃນສະເປນ, ມີເສລີພາບໃນການປາກເວົ້າ ແລະການຊຸມນຸມ, ບໍ່ມີການຂູດຮີດເກັບພາສີ ແລະເກນຄົນຟິລິບປິນເຂົ້າເປັນນັກບວດຢ່າງເປັນທາງການ. ໃນຂະບວນເຄື່ອນໄຫວນັ້ນ ຍັງປະກອບດ້ວຍປັດໄຈສຳຄັນດ້ານວັດທະນະທຳ ແບບຊາດນິຍົມອີກ ຮວມທັງການເນັ້ນສຳຄັນ ວັນນະຄະດີ ແລະສິລະປະ ຕາກາລອກ, ປະຫວັດສາດຟິລິບປິນ ກ່ອນສະເປນເຂົ້າມາປົກຄອງ ແລະຄວາມພະຍາຍາມ ໃນການສ້າງສະຕິສຳນຶກເພື່ອຄົ້ນຫາ ແລະຈຳແນກເອກະລັກຂອງຊາດ. ການເຄື່ອນ ໄຫວນັ້ນ ປະສົມປະສານດ້ວຍບົດສັ່ງສອນສິລະທຳ ແລະບົດເພີດເພີນອາລົມສຳລັບຊາວຫນຸ່ມ, ຕຳນິຕິຕຽນສະຖາບັນ ຟິລິບປິນ ທີ່ມີດບອດງົມງວາ ເຊັ່ນ ລະບົບ ຄາຊິເກ (cacique) ພ້ອມດ້ວຍການປາບປາມ ຂອງສະເປນ. ພາຫະນະອັນຕົ້ນຕໍຂອງຂະບວນການ ແມ່ນຫນັງສືພິມ ຊື່ ລາ ໂຊລິດາຣິດາດ (La Solida ridad) ເຊິ່ງເລີ່ມພິມອອກໃນປີ 1889 ຢູ່ ບາຣ໌ຊີໂລນາ ແລ້ວຕໍ່ມາ ໄດ້ຍ້າຍໄປອອກຢູ່ ມາດຣິດ. ໂຄສົກຜູ້ມີຊື່ສຽງສອງຄົນ ຂອງຫນັງສືພິມນີ້ ແມ່ນ ມາຣ໌ຊີໂລ ເຮຊ ເດລປີລາຣ໌ (ປລາຣິເດລ) ແລະ ໂຮເຊ ຣິຊາຣ໌ລ (José Rizal) ບຸກຄົນທັງສອງ ໄດ້ກາຍເປັນນັກການເມືອງຍ້ອນ ການປາບປາມ ຢູ່ ຄາວິເຕ ມູຕິນີ (ກອງທະຫານ) ໂດຍພວກສະເປນ. ຣິຊາລ ຄົນລູກຊອດຈີນ ຮຸ່ນທີຫ້າ ຜູ້ຮັ່ງມີ ໄດ້ຂຽນບັນທຶກກຽວກັບຕົນເອງວ່າ "ຖ້າບໍ່ແມ່ນເພື່ອປີ 1872 ແລ້ວ ເຂົາກໍອາດໄດ້ເປັນນັກບວດ ເຍຊູ ອົງນຶ່ງແລ້ວ ແລະແທນທີ່ຈະໄດ້ຂຽນເລື່ອງ ໂນລີ ມ ຕັງ ເກເຣ ເລື່ອງສັ້ນເລື່ອງທຳອິດ ທີ່ໂດ່ງດັງທີ່ສຸດຂອງເຂົາ-ເຂົາກໍອາດໄດ້ຂຽນແນວກົງກັນຂ້າມ ກໍເປັນໄດ້.

ພວກປັນຍາຊົນທ້ອງຖິ່ນ ໄດ້ຮັບອິດທິພົນຢ່າງເລິກເຊິ່ງ ຈາກປະເພນີ ຕໍ່ຕ້ານນັກບວດຂອງເອີຣົບ ສະໄຫມສະຕະວັດທີ 19, ໂດຍສະເພາະຂະບວນການມາໂຊນິກ (ສິ່ງເສີມພະລາດອນພາບ) ຂອງສະເປນ, ຂະບວນການນີ້ ເຮັດຫນ້າທີ່ເຊື່ອມຕໍ່ສະຖາບັນ ແລະອຸດົມການ ພວກປົດປ່ອຍຊາວສະເປນ ກັບ ນັກໂຄສະນາປຸກລະດົມຊາວ ຟິລິບປິນ. ໂດຍສະເພາະ ເດລ໌ປີລາຣ໌ ໄດ້ແນມເຫັນວ່າ ກະບອກສຽງຂອງອົງການ ມາໂຊ

ນິກ ເປັນພາຫະນະດຳເນີນກິດຈະກຳ ທາງການເມືອງທັງຢູ່ໃນສະເປນ ແລະໃນໝູ່ເກາະດອນ. ການຕີບ ໃຫຍ່ຂອງສີ່ ຟິລິບປິນ ຊື່ວ່າ "ການປະຕິວັດ" ແລະຕໍ່ມາ ສືບທອດໂດຍ " ໂຊລິດາຣິແດດ" ໄດ້ນຳໄປສູ່ການ ກໍ່ຕັ້ງໜັງສືພິມ ມາໂຊນິກ(ພະລາດອນພາບ) ໃນກະໂຕ ຟິລິບປິນເອງ.

ເມື່ອຂະບວນການໂຄສະນາປຸກລະດົມ ສຸກງອມດີແລ້ວ ມັນກໍມີການຮຽກຮ້ອງຫລາຍຂຶ້ນ ໂດຍສະ ເພາະພາຍຫລັງ ທີ່ ເດລ ປິລາຣ໌ ເຂົ້າກຳອຳນາດໃນ ໜັງສືພິມ "ລາ ໂຊລິດາຣິເດດ". ເຂົາໂຈມຕີນັກບວດ ທ້ອງຖິ່ນ ໃນເລື່ອງ "ການຂູດຮີດຂອງວັດ" ພ້ອມກັບການວິພາກວິຈານອັນແຫລມຄົມ ໃນເລື່ອງສັ້ນຂອງ ຣິ ຊາລ໌ ທີ່ເລັ່ງແລໃສ່ພຶດຕິກຳສວຍໃຊ້ອຳນາດຂອງນັກບວດທ້ອງຖິ່ນ ເຮັດໃຫ້ພວກສະເປນຕື່ນຕົວ. ຕົວຢ່າງ ອະທິການບໍດີມະຫາວິທະຍາໄລ ຊານໂຕ ໂທມາສ ຕິຕຽນນິຍາຍຂອງ ຣິຊາຣ໌ ວ່າເປັນເລື່ອງ "ນອກຮີດ ເປັນ ບາບຫນັກ ແລະໃສ່ຮ້າຍປ້າຍສີໃຫ້ວົງການສາສະຫນາ ຕໍ່ຕ້ານຄວາມຮັກຊາດ ແລະ ທຳລາຍຄວາມເປັນ ລະບຽບຮຽບຮ້ອຍຂອງສັງຄົມ" ແລະເປັນໂທດກຳສຳລັບວົງການປັດຈຸບັນ. ໂດຍສະເພາະ ການຖືສິດເປັນ ເຈົ້າຂອງດິນ ຂອງນັກບວດທ້ອງຖິ່ນ ໄດ້ກາຍເປັນຂອດຂັດແຍ່ງຮຸນແຮງ. ໃນປີ 1887 ຍ້ອນຫມາກຜົນຂອງ ການຕອບໃບຄຳຖາມຂອງລັດຖະບານ ກຽວກັບພາສີ ຣິຊາລ໌ ແລະຄອບຄົວໄດ້ຈັດການຍື່ນຄຳຮ້ອງອຸທອນ ໃຫ້ມີສັນຍາຢ່າງເປັນທາງການທີ່ຍຸຕິທຳ ສຳລັບການຂາຍທີ່ດິນໃຫ້ແກ່ຜູ້ເຊົ່າດິນ. ຄຳຮ້ອງອຸທອນກາຍ ເປັນ ກໍລະນີທົດລອງສຳລັບທຸກພາກສ່ວນ. ການປະທ້ວງກຽວກັບຄ່າເຊົ່າ ໄດ້ຈັດຕັ້ງຂຶ້ນ, ພວກນັກບວດ ໂດມິນິກັນ ດຳເນີນການຟ້ອງຮ້ອງໄລ່ຜູ້ເຊົ່າ ແລະບັນຫາກໍ່ຖືກສົ່ງຂຶ້ນສານ. ທ່ານຂ້າຫລວງໃຫຍ່ ເມື່ອຮູ້ວ່າແມ່ນລັກສະ ນະທາງການເມືອງຂອງບັນຫາ ກໍເລີຍເຂົ້າເປັນຝ່າຍດຽວກັບ ພະໂດມິນິກັນ ເພິ່ນຈັດສົ່ງກອງທະຫານໄປ ຂັດຂວາງການວ່າຄວາມໃນສານ ໃຫ້ເວລາຜູ້ເຊົ່າ 24 ຊົ່ວໂມງ ເພື່ອຍົບຍ້າຍອອກ ແລະຈູດເຜົາເຮືອນຊານ ຂອງພວກເຂົາ. ມີຄົນຖືກຈັບແລະຂັບໄລ່ອອກຊາວຫ້າຄົນ ໃນນັ້ນ ນັບທັງ ພໍ່ຂອງ ຣິຊາລ໌ ແລະນ້ອງສາວ ສາມຄົນນຳ.

ມາເຖິງຕົ້ນຊຸມປີ 1890 ນັກໂຄສະນາປຸກລະດົມ ກາຍເປັນຜູ້ເຂົ້າໃຈຄວາມເປັນຈິງ ແລະເປັນຜູ້ເຈັບ ປວດ. ເປົ້າຫມາຍຂອງການກືນກິນຂອງຈັກກະພັດສະເປນຖືກປະຖິ້ມໄປ ແລະຊາວອົບພະຍົບ ກໍເລີ່ມເຂົ້າໃຈ ວ່າ ອິດທິພົນຂອງພວກຕົນ ຕໍ່ເຫດການນັ້ນ ເບົາບາງລົງຊັກໄຊ້ ຕາບໃດທີ່ພວກເຂົາຍັງຢູ່ໃນຕ່າງປະເທດ. ການໂຄສະນາປຸກລະດົມ ກັບການຍົບຍວາຍ ມີປະສິດທິຜົນດ້ານເລັກນ້ອຍເທົ່ານັ້ນ. ເດລ ປິລາຣ໌ ປະຖິ້ມ ຄວາມຫວັງ ທັງມວນກຽວກັບການປ່ຽນແປງສັງຄົມແບບສັນຕິ ແລະກ່ອນທີ່ເຂົາຈະຕາຍໄປ ໃນປີ 1896 ເຂົາກໍເລີ່ມໄດ້ເຫັນຂະບວນການປະຕິວັດ ແດ່ແລ້ວ.

ເມື່ອກັບຄືນມາບ້ານເກີດ ໃນປີ 1892 ຣິຊາລ໌ ໄດ້ຈັດຕັ້ງອົງການ ລາລີກາ ຟິລິບປິນາຂຶ້ນໃນທັນທີ. ອົງການ ລາລີກາ ມີແຜນການ ທີ່ບໍ່ເປັນຊ້າຍຈັດຂວາໂພດ ສ່ວນໃຫຍ່ ແມ່ນ ເນັ້ນໃສ່ຄວາມກ້າວຫນ້າ ທາງເສດຖະກິດ ແລະການສຶກສາ. ຢ່າງໃດກໍດີ ເຫດການນັ້ນ ກໍຍັງເປັນເລື່ອງຫນ້າຢ້ານ ສຳລັບພະນັກ ງານຊາວສະເປນຂີ້ຢ້ານ ທີ່ມາຈັບກຸ່ມ ຣິຊາລ໌ ແລະເມລະເຫດເຂົາໄປ ຢູ່ ມິນດານາວ. ຄວາມດື້ດ້ານ ຂອງສະເປນ ເຮັດໃຫ້ ອັງເດຣ ໂບນິຟາຊິໂອ ພະນັກງານຄົນນຶ່ງ ຢູ່ມະນີລາ ຮີບຮ້ອນຈັດຕັ້ງອົງການ ຊື່ ກາຕິປູນັນ ຂຶ້ນ ອັນເປັນຊື່ຕາມຄຳຫຍໍ້ໃນພາສາກາຕາລອກ ທີ່ຫມາຍຄວາມວ່າ "ສະມາຄົມລູກຊາຍປະຊາ ຊົນ ຜູ້ສູງສົ່ງ ແລະຫນ້ານັບຖືທີ່ສຸດ". ອົງການນີ້ ກາຍເປັນອົງກອນພະລາດອນໃຫມ່ ແລະ ເຄື່ອນໄຫວລັບ ທີ່ສຸດ. ໂດຍປະຕິບັດການຜ່ານຫົວຫນ່ວຍນ້ອຍໆ ອົງການເຄື່ອນໄຫວໄປຕາມ ຈຸດຫມາຍແຫ່ງການປະ ຕິວັດທີ່ຕົກລົງໄວ້ແລ້ວ. ໂບນາຊິຟາໂອຮັບຮູ້ເປັນຢ່າງດີ ເຖິງລະດັບການສຶກສາອັນຈຳກັດຂອງຕົນ ຈຶ່ງໄດ້ພະ ຍາຍາມດຶງເອົາພວກປັນຍາຊົນທ້ອງຖິ່ນເຂົ້າມາຢູ່ໃນ ກະຕິປູນັນ. ເຖິງຢ່າງໃດກໍດີ ຈຸດຫມາຍແຫ່ງການ ປະຕິວັດຂອງເຂົາຫລາຍຂໍ້ ໄດ້ເຮັດໃຫ້ຫລາຍຄົນຢ້ານກົວ ແຕກຫນີໄປ ຮວມທັງ ອາໂປລິນາຣິໂອ ມາບິນິ, ອັນໂຕນິໂອ ລູນາ, ຣາຟາແອລ ປາລມາ, ແລະຜູ້ສຳຄັນທີ່ສຸດກໍຄື ກະໂຕ ໂຈເຊ ຣິຊາລ໌ ເອງ. ໂບນາຟີຊິໂອ ກໍເລີຍເໝີດຫວັງທີ່ຈະໄດ້ຮັບການສະຫນັບສະຫນຸນຈາກພວກເຂົາ ຈຶ່ງປ່ຽນມາວາງແຜນດຶງເອົາພວກເຂົາ ເຂົ້າມາຜົວພັນນຳ ໂດຍການປອມລາຍມື ດ້ວຍຫວັງວ່າ ການປາບປາມຂອງພວກສະເປນ ຄົງບີບໃຫ້ພວກ

ເຂົ້າມາເຂົ້າຂ້າງຕົນເອງ. ພວກສະເປນໄດ້ຮູ້ຂ່າວກ່ຽວກັບ ກາຕິປູນັນ ແລະເມື່ອເດືອນສິງຫາ ທີ 26 ປີ 1896 ໂບນາຊິຟິໂອກັບຜູ້ຍູ້ຫນຸນເຂົາ ຈຳຕ້ອງຫລົບຫນີໄປຢູ່ນອກ ເມືອງມະນີລາ ເຂດ ບາລິນຕາວັກ ນະທີ່ນັ້ນ ເຂົາໄດ້ປະກາດຮຽກຮ້ອງໄຂບັ້ນ ກ່ຂະບົດຂຶ້ນ. ການຂະບົດຂອງ ໂບນິ ຊິຟາຊິໂອ ແຜ່ລາມອອກທົ່ວ ກຸງ ມະນີລາ ແຕ່ເລ່ຽມເພື່ອພິຊິດໃຈພວກປັນຍາຊົນມະນີລາລົ້ມແຫລວໄປ ເຖິງຢ່າງນັ້ນ ພວກສະເປນ ກໍໄດ້ ຈັບກຸມ ແລະທໍລະມານສະມາຊິກຂອງພວກເຂົາຫລາຍຄົນ.

ໂບນາຊິຟາຊິໂອ ຕ້ອງການລະດົມ ເອົາພວກປັນຍາຊົນມາເຄື່ອນໄຫວໃຫ້ສຳເລັດຜົນ. ເຖິງແມ່ນວ່າ ສະຖານະພາບຂອງພວກປັນຍາຊົນທ້ອງຖິ່ນນັ້ນ ຖືກກຳນົດດ້ວຍລະດັບຄວາມສຳເລັດດ້ານການສຶກສາເປັນ ຕົ້ນຕໍ, ພວກລູກຊາຍຂອງຜູ້ຮັ່ງມີ (ອິນຄີລິໂນສ ຫລື ຄາຄິເຄວສ) ມີໂອກາດເຂົ້າເຖິງການສຶກສາຫລາຍ ກວ່າ. ໂບນິຟາຊິໂອ ເປັນຄົນທຸກຍາກ ຢູ່ໃນເມືອງ ແລະທີ່ສຳຄັນກວ່າຫມູ່ ແມ່ນບໍ່ມີການສຶກສາ ຕາມມາດ ຖານຂອງພວກປັນຍາຊົນທ້ອງຖິ່ນ. ດັ່ງນັ້ນ ເຂົາຈຶ່ງຂາດເສັ້ນທາງເຂົ້າເຖິງເງິນ ອຳນາດ ແລະກຸ່ມຄົນຜູ້ຢູ່ ນອກ ເຂດຄຸ້ມ ທີ່ປາກພາສາຕາກາລັອກ ອ້ອມຮອບເມືອງມະນີລາ. ມີແຕ່ພວກປັນຍາຊົນ ທ້ອງຖິ່ນເທົ່ານັ້ນ ຈຶ່ງສາມາດຮຽກຮ້ອງເຖິງການເລືອກຕັ້ງແຫ່ງຊາດ. ຢ່າງໃດກໍດີ ພວກປັນຍາຊົນຮຸ່ນໃຫມ່ ທີ່ພົ້ນເດັ່ນຂຶ້ນມາ ໄດ້ປະຕິເສດ ທີ່ຈະຍອມຮັບການນຳພາ ຂອງ ໂບນິຟາຊິໂອ ຍ້ອນວ່າພວກເຂົາໄດ້ຍຶດເອົາສິດມາເປັນຂອງ ຕົນເອງແລ້ວເພື່ອເວົ້າໃນນາມຂອງລັດທະຊາດນິຍົມ ຟິລິບປິນ. ຣິຊາລ ເວົ້າໄວ້ກ່ອນຫນ້ານີ້ຫລາຍປີວ່າ "ຊົນ ຊັ້ນຜູ້ມີ ການສຶກສາຈຳນວນຫລວງຫລາຍ ທັງທີ່ຢູ່ເທິງເກາະດອນ ແລະພາຍນອກ ບັດນີ້ຕ້ອງ ຖືກຮັບຮູ້... ຊົນຊັ້ນນຳ ທີ່ມີການສຶກສາເຕີບໃຫຍ່ຢ່າງຕໍ່ເນື່ອງ. ມັນຈຶ່ງເປັນການຕິດຕໍ່ແບບເນື່ອງນິດກັບຜົນລະເມືອງ ສ່ວນທີ່ເຫລືອ ແລະຖ້າຫາກວ່າໃນວັນນີ້ ຍັງບໍ່ທັນແມ່ນມັນສະຫມອງຂອງຊາດ ມັນກໍ່ຈະຕ້ອງກາຍເປັນ ລະບົບປະສາດທັງຫມົດ ໃນອີກບໍ່ເທົ່າໃດປີ. ເມື່ອນັ້ນ ພວກເຮົາກໍຈະໄດ້ຮູ້ວ່າມັນຈະເຮັດຫຍັງແດ່".

ຢ່າງໃດກໍດີ ຄວາມເຫງີຫງາ ຂອງສະເປນ ບັນລຸຜົນ ໃນສິ່ງທີ່ ໂບນິຟາຊິໂອ ບໍ່ສາມາດເຮັດໄດ້ ໂດຍການລູບເລຽ ຫລື ປອມແປງເອກະສານ. ພະນັກງານສະເປນ ຮູ້ດີວ່າ ພວກປັນຍາຊົນທ້ອງຖິ່ນ ເປັນຜູ ຂະຫຍາຍຄວາມສຳນຶກຊາດນິຍົມ ໄດ້ຟ້ອງ ຣິຊາລ ຂຶ້ນສານ ໃນຖານະທີ່ເປັນຜູ້ຈັດຕັ້ງຕົ້ນຕໍ ແລະເປັນວິນ ຍານຂອງການກໍ່ການລຸກຮືຂຶ້ນຂອງຊາວຟິລິບປິນ . ຢູ່ໃນຄຸກ ຣິຊາລ ໄດ້ຂຽນ "ຖະແຫລງການເຖິງຊາວ ຟິລິບປິນ ບາງຄົນ" ສິ່ງອອກມາ ເຊິ່ງໃນນັ້ນ ເຂົາໄດ້ຍ້ຳຕື່ມວ່າ ການສຶກສາຂອງປະຊາຊົນ ເປັນປັດໃຈສຳ ຄັນອັນດັບຕົ້ນ ສຳລັບອິດສະລະພາບ ຂໍໃຫ້ຈື່ໄວ້ວ່າ ຫາກປາສະຈາກການສຶກສາ ແລະຄຸນນະທຳຂອງພົນ ລະເມືອງແລ້ວ ຊາວຟິລິບປິນ ບ່ອາດສາມາດ ພົບກັບການຫລຸດພົ້ນໄດ້. ເຂົາຍັງຍ້ຳອີກວ່າ ການປະຕິຮູບ ຖ້າຢາກໃຫ້ໄດ້ຜົນດີແລ້ວ ຈະຕ້ອງມາແຕ່ຂັ້ນເທິງ ເພາະການປະຕິຮູບຈາກຂັ້ນລຸ່ມ ຄືການເກີດກະລິຍກ ທັງວຸ່ນວາຍ ຮຸນແຮງ ແລະບໍ່ທົນທານ. ຣິຊາລ ປະນາມ "ການລຸກຮືອັນຫນ້າສົມເພດ ແລະປ່າເຖື່ອນອັນນີ້" ແຕ່ພວກສະເປນປະລາໄຊທີ່ຈະເຫັນໂອກາດຂອງພວກເຂົາເພື່ອແຍກປ່ຽວ ໂບນິຟາຊິໂອ ອອກຈາກກຸ່ມ ທີ່ ເຂົາຕ້ອງການກວ່າຫມູ. ໃນທາງປີ້ນກັນ ພວກເຂົາຊ້ຳເຮັດສິ່ງນຶ່ງ ຄືວ່າຈະຊ່ອຍເຕົ້າໂຮມພວກປັນຍາຊົນ ທ້ອງຖິ່ນ ເຂົ້າກັບກາຕິປູນັນ-ພວກເຂົາປະຫານ ຣິຊາລ ຕໍ່ຫນ້າປະຊາຊົນ ແລະດຳເນີນການປົກຄອງ ອັນ ຫນ້າກະເທືອນຂວັນ ໃສ່ພວກສາວົກຂອງລາວ. ຫລາຍປີກ່ອນຫນ້ານີ້ ຣິຊາລ ໄດ້ຂຽນໄວ້ວ່າ " ມື້ທີ່ພວກເຂົາ (ຄົນສະເປນ) ມອບເວນຄວາມທຸກທໍລະມານແກ່ມວນມະນຸດ...ລາກ່ອນ ລັດຖະບານ ນັກບວດທ້ອງຖິ່ນ ແລະ ອາດຈະລາກ່ອນ ລັດຖະບານ ສະເປນນຳ..."

ການເພີ່ມຂຶ້ນຂອງພົນລະເມືອງ, ການແຜ່ກະຈາຍແນວຄຶດ ຂອງຂະບວນການໂຄສະນາປຸກລະດົມ, ລາຄາເຂົ້າສູງຂຶ້ນ ການຕົກຕ່ຳທາງທຸລະກິດ ທີ່ສືບຕໍ່ມາຈົນເຖິງ ຫລັງປີ 1893, ການລະບາດຂອງແມງ ໄມ້ ແລະການແບກຫາບພາລະພາສີ ທີ່ສູງຂຶ້ນເລື້ອຍໆ, ການປະຕິວັດຄິວບາ ແລະການໄຮ້ປະສິດທິພາບ ໃນ ການປົກຄອງຂອງສະເປນ ທີ່ຊ້ຳເຮື້ອມາດົນ ທັງຫມົດນີ້ ໄດ້ເປັນຜົນດີໃຫ້ອົງການ ກາຕິປູນັນ. ສ່ວນວ່າ ໂບນິ ຟາຊິໂອນັ້ນ ກໍໄດ້ພິສູດຕົວເອງວ່າ ເປັນນາຍພົນຜູ້ໄຮ້ຄວາມສາມາດແທ້ໆ. ແລະແລ້ວ ແມ່ນຢູ່ ຄາວິດເຕ ກົງກັນຂ້າມກັບອ່າວມະນີລາ ບ່ອນທີ່ພະນັກບວດທ້ອງຖິ່ນ ເປັນເຈົ້າຂອງດິນນາຮອດເຄິ່ງນຶ່ງ ອ້າຍບ່າວ

ລູກຊອດຈີນ ຊື່ ເອມິລິໂອ ອາກິນາລໂດ ສາມາດເອົາຊະນະສົງຄາມສຳຄັນບັ້ນນຶ່ງ ເໜືອກອງທະຫານ ສະເປນ. ໄຊຊະນະຂອງເຂົາ ໄດ້ນຳເອົາຫົວໃຈຫນ່ວຍໃຫມ່ມາໃຫ້ນັກປະຕິວັດຟິລິບປິນ ແລະເນລະມິດໃຫ້ ອາກິນາລໂດ ກາຍເປັນວິລະຊົນໃນຊົ່ວຄ່ຳຄືນນັ້ນໂລດ. ເຂົາຈຶ່ງຟ້າວເດີນທາງໄປຫາໂບນິຟາຊິໂອ ເພື່ອຍາດ ເອົາຕຳແໜ່ງຜູ້ນຳ.

ຄວາມຜູກພັນ ຕາມສາຍພີ່ນ້ອງ ມີບົດບາດໃຈກາງຢູ່ໃນການຕໍ່ສູ້ອັນສະຫລັບຊັບຊ້ອນ ທີ່ເກີດ ຕໍ່ມາ. ພາຍຫລັງລະຍະສັບສົນ ແຫ່ງການປະທະທາງການເມືອງແລ້ວ ອາກິນາລໂດ ຜູ້ເຊິ່ງດຳເນີນການ ໄວ້ແລ້ວ ເພື່ອໃຫ້ໄດ້ຮັບເລືອກຕັ້ງ ເປັນຫົວໜ້າຂະບວນການ ໄດ້ໃຫ້ຈັບກຸມ ໂບນິຟາຊິໂອ ຖານທີ່ທໍລະຍົດ ເມື່ອເດືອນເມສາ 1897. ຄຳຕູ່ຫາ ແລະການສືບສວນ ໃນເວລາຕໍ່ມາ ໂດຍຜູ້ສະໜັບສະໜຸນອາກິນາລໂດ ເປັນເລື່ອງຂີ້ຕົວະ. ໂບນິຟາຊິໂອ ບໍ່ໄດ້ເຮັດຫຍັງ ເປັນການທໍລະຍົດ ຕໍ່ລັດທິຊາດນິຍົມຂອງ ຟິລິບປິນ, ເຂົາ ພຽງແຕ່ເສຍໄຊໃນການຕໍ່ສູ້ ເພື່ອຄວບຄຸມການປະຕິວັດເທົ່ານັ້ນ. ເຖິງຢ່າງໃດກໍດີ, ຜູ້ຮອງຂອງ ອາກິ ນາລໂດ ກໍເຫັນວ່າ ເຂົາມີຄວາມຜິດ ແລະໄດ້ຕັດສິນປະຫານຊີວິດເຂົາ, ອາກິນາລໂດເອງ ໄດ້ອອກປະກາດ ນິລະໂທສະກຳໃຫ້ ແຕ່ມັນກໍບໍ່ມີຫຍັງໜ້າຕື່ນເຕັ້ນ ຫລື ຜິດຫວັງ ເມື່ອບໍ່ສາມາດນຳເອົາຄຳປະກາດນັ້ນ ໄປແຈ້ງໃຫ້ທັນການ ໂບນິຟາຊິໂອ ຖືກຍິງເປົ້າໄປ. ເຖິງແມ່ນ ວ່າ ອາກິນາລໂດ ໂປໂລຂຶ້ນມາເປັນຜູ້ນຳ ຢ່າງບໍ່ມີໃຜຍັດຄ້ານກໍຕາມ ການປະຕິວັດ ກໍຍັງສັ່ນສະເທືອນຢ່າງແຮງ ເນື່ອງຈາກການຊ່ວງເສັ້ງຍາດ ອຳນາດກັນ.

ຄວາມລົ້ມແຫລວຂອງພວກ ກາປີຕຸນານ ເພື່ອລະດົມປັນຍາຊົນທ້ອງຖິ່ນແຕ່ຕອນທຳອິດພຸ້ນ, ການ ຕໍ່ສູ້ເພື່ອຄວາມເປັນຜູ້ນຳ ທີ່ຍັງບໍ່ທັນແໜ້ນໜຽວນຳກັບການປົກຄອງຂອງສະເປນ ທີ່ເຕັມໄປດ້ວຍຄວາມ ຫນ້າຢ້ານກົວ ແລະການເຜີ່ງພາພຽງແຕ່ ຫມູ່ຄູ່ຍາດມິດ ຂອງ ອາກິນາລໂດ ຢູ່ ຄາວິເຕ ໄດ້ຈຳກັດຄວາມ ສາມາດຂອງເຂົາ ທີ່ຈະປຸກລະດົມການປະຕິວັດໄປທົ່ວທຸກເກາະດອນ. ສະເປນຕອບໂຕ້ການປະຕິວັດ ດ້ວຍ ກຳລັງອາວຸດ ດ້ວຍການລະດົມອາສາສະໝັກຈາກເຂດຄຸ້ມກຸ່ມພາສາ ແລະທ້ອງຖິ່ນ ທີ່ມາແຕ່ນອກ ມະນີ ລາ ຄື ປຳປັງກາ ຄາກາຍານ ອິໂລກອສ ປັງກະສິນານ ແລະຫມູ່ເກາະດອນບິສາຍະ ແລະໂດຍການເອົາ ກອງທະຫານ ມາຈາກສະເປນຕື່ມ, ເຖິງປີ 1897 ພວກສະເປນ ໄດ້ຕື່ມກຳລັງທະຫານຫລາຍຂຶ້ນ ຈົນເຖິງ ຈຸດທີ່ເຕັກໂນໂລຊີທາງທະຫານ ແລະການຄົມນາຄົມທີ່ເໜືອກວ່າ ອຳນວຍໃຫ້ພວກເຂົາ ມີທ່າເໜືອກວ່າ ໃນການສູ້ຮົບ. ອາກິນາລໂດ ຖືກໄລ່ອອກຈາກ ຄາວິເຕ ແຂວງບ້ານເກີດຂອງຕົນເອງ ແລະເຂົ້າໄປຫລົບຢູ່ ສາຍພູ ບູລາກັນ ບ່ອນເຂົາຕັ້ງກອງບັນຊາການໃຫຍ່ຊົ່ວຄາວຂຶ້ນ ຢູ່ໃນບ້ານນ້ອຍໆແຫ່ງນຶ່ງ ຊື່ ບະຍັກ ນະ ບາໂຕ. ໃນເດືອນພະຈິກ ຜູ້ຮອງຂອງເຂົາຄົນນຶ່ງ ຂຽນສິ່ງທີ່ເອີ້ນກັນໃນເວລານັ້ນວ່າ ລັດຖະທຳມະນູນ ຂອງ ບິຍັກ ນະບາໂຕ ອັນເປັນຄວາມພະຍາຍາມ ເພື່ອໃຫ້ລັດຖະບານທີ່ ອາກິນາລໂດປະກາດອອກນັ້ນ ມີຄວາມ ຖືກຕ້ອງຕາມກົດໝາຍ. ຢ່າງໃດກໍຕາມ ເຖິງແມ່ນວ່າ ມີຄຳບັນຍາຍແບບຮັກຊາດ ບັນຈຸແໜ້ນຢູ່ໃນ ເອກະສານ ແຕ່ມັນກໍເປັນທີ່ຈະແຈ້ງວ່າ ການປະຕິວັດພວມຢູ່ໃນທ່າຈົນຕາແຈ.

ເປັນແຕ່ບຸນ ສຳລັບ ອາກິນາລໂດ ແລະຊາວຟິລິບປິນ, ພວກສະເປນເອງ ກໍມີບັນຫາຫນັກໜ່ວງ ຄ້າຍຄືກັນ, ສົງຄາມການປົດປ່ອຍຊາດ ຂອງຄິວບາ ເກີດຂຶ້ນໃນຊຸມປີດຽວກັນ ບັງຄັບໃຫ້ສະເປນ ຕ້ອງສະ ຫລະກອງທະຫານ ແລະຊັບສົມບັດສ່ວນໃຫຍ່ຂອງຊາດ ໄປປາບປາມສົງຄາມນັ້ນ. ພວກສະເປນຮູ້ດີວ່າ ພວກເຂົາບໍ່ສາມາດດຳເນີນສົງຄາມຄ້າຍຄືກັນຢູ່ໃນຟິລິບປິນ. ຕາມທັດສະນະຂອງສະເປນ ຈຳເປັນຕ້ອງໄດ້ ຖ່ວງເວລາໄວ້ເພື່ອຫລຸດຜ່ອນຄ່າໃຊ້ຈ່າຍ ແລະຟື້ນຟູສັນຕິພາບ. ຕາມທັດສະນະຂອງ ອາກິນາລໂດ ຍຸທະ ວິທີອັນແນ່ນອນ ແມ່ນສ້າງຄວາມບີບຄັນໄວ້. ດັ່ງນັ້ນ ເຂົາຈຶ່ງຕົກລົງເຈລະຈາ ຜ່ານປັນຍາຊົນທ້ອງຖິ່ນ ຄົນນຶ່ງ ທີ່ແຕ່ງຕັ້ນຕົນເອງ ຊື່ວ່າ ເປໂດຣ ປາຕີໂນ, ອາກິນາລໂດ ຍໍໃຫ້ຍັບໄລ່ນັກບວດ ໂຣມັນກາໂທລິກ ທ້ອງຖິ່ນອອກໄປ ຕັ້ງຕົວແທນໃນສານ ຄໍຣ໌ແຕສ, ໃຫ້ມີຄວາມສະເໜີພາບໃນຂະບວນການຍຸຕິທຳ ໃຫ້ມີການ ມີສ່ວນຮ່ວມໃນລັດຖະບານ ການປັບປ່ຽນພາສີຊັບສິນ, ການກຳນົດໜ້າທີ່ ປະຈຳຕາແສງສຳລັບນັກບວດ ຊາວຟິລິບປິນ ແລະກົດໝາຍວ່າດ້ວຍສິດທິ. ເຖິງຢ່າງໃດກໍດີ ໃນທີ່ສຸດ ຂໍ້ຕົກລົງນັ້ນ ກໍໄດ້ຮັບການຍອມຮັບ

ໂດຍທີ່ບໍ່ໄດ້ບັນຈຸເອົາບົດບັນຍັດເຫລົ່ານັ້ນໄວ້ນຳເລີຍ. ສິ່ງທີ່ໄດ້ເປັນການຕອບແທນກໍຄື ບັນດານັກປະຕິວັດ ໄດ້ຮັບຄຳໜັ້ນສັນຍາວ່າຈະໄດ້ຮັບນິລະໂທດສະກຳ ໝາຍຄວາມວ່າ ມີໂອກາດທີ່ຈະບໍ່ຖືກບັງຄັບໃຫ້ ໄປລີ້ໄພຢູ່ບ່ອນອື່ນ ແລະຈະໄດ້ຮັບຄ່າປັບໄໝ ເປັນເງິນ 800,000 ເປ ໂຊສ ຈ່າຍເປັນ ສາມງວດ.

ອາກິນາລໂດ ໄດ້ກ່າວອ້າງ ໃນເວລາຕໍ່ມາວ່າ ສະເປນ ໄດ້ສັນຍາວ່າ ຈະໃຫ້ຫລາຍກວ່ານີ້ ຫລາຍ ແຕ່ສິ່ງທີ່ໄດ້ ຂຽນໄວ້ໃນສັນຍາ 3 ຂັ້ນຕອນ ມີແຕ່ເລື່ອງນິລະໂທດສະກຳ ແລະ ເງິນເທົ່ານັ້ນ ຈຶ່ງເປັນອັນວ່າ ສະເປນ ເປັນຝ່າຍມີໄຊຊະນະອັນສຳຄັນ ຍ້ອນວ່າດ້ວຍເງິນຈຳນວນດ້ານໜ້ອຍດຽວ ພວກເຂົາ ກໍເຮັດໃຫ້ ອາກິນາລໂດ ຍຸຕິການຕໍ່ຕ້ານລົງໄດ້ ແລະໜີອອກຈາກປະເທດໄປ ຄວາມຈິງນັ້ນເຂົາເອງ ແລະກຸ່ມຜູ້ ສະໜັບສະໜຸນ ຕັ້ງໃຈໄວ້ແນ່ວແນ່ວ່າຈະຊົມໃຊ້ເງິນຈຳນວນ 400,000 ເປໂຊສ ນັ້ນ ໄປຊື້ອາວຸດ ຢູ່ຮ່ອງກົງ ພວກສະເປນ ກໍເລີຍສັ່ງການໃຫ້ ຮ້ອງເພງ ເຕດວມ ໃນໂບດເມືອງມະນີລາ.

ຕຳແໜ່ງຂອງ ອາກິນາລໂດ ໃນປະຫວັດສາດ ຖືກກອບກູ້ໄວ້ ດ້ວຍອຸບັດເຫດການແຊກແຊງເຂົ້າ ໃນການປະຕິວັດຄິວບາ ຂອງ ອາເມລິກາ. ສົງຄາມລະຫວ່າງສະເປນ ແລະອາເມລິກາ ເຊິ່ງໜາກຜົນ ຂອງມັນ ກະທົບໃສ່ ການຊັ່ງຊາກຳລັງ ເຊັ່ນ ກອມມໍດໍຣ ຊອກເຊີ ເດວີວ ພາຍໃຕ້ຄຳສັ່ງທຳລາຍກອງທັບ ເຮືອສັດຕູ ຢູ່ໃນມະຫາສະໜຸດ ປາຊີຟິກ ທີ່ມຸ່ງໜ້າສູ່ມະນີລາ ແລະຂັດຂວາງເສັ້ນທາງຂອງເຮືອຮົບສະ ເປນ. ເຖິງແມ່ນວ່າຈະເຫັນໄດ້ຈະແຈ້ງວ່າ ການມີທະຫານຢູ່ທີ່ນັ້ນສືບຕໍ່ມາ ຂອງອາເມລິກາ ແມ່ນເພື່ອລໍ້ຖ້າ ແລະທຳລາຍໜ່ວຍກູ້ໄພ ຂອງສະເປນ ກໍຕາມ, ພວກອາເມລິກາ ກໍເລີ່ມເຂົ້າໃຈ ຄວາມເປັນຈິງທີ່ວ່າພວກ ເຂົາຂະຫຍາຍຖານທັບອອກມາ ເຖິງຕາເວັນອອກໄກແລ້ວ. ພວກສະເປນ ກໍເຊັ່ນດຽວກັນ ເລີ່ມເຂົ້າໃຈໃນ ສະຖານະການທີ່ປ່ຽນໄປ ຈຶ່ງພະຍາຍາມຟື້ນຟູກອບກູ້ ເອົາຄວາມພັກດີ ຈາກຊາວຟິລິບປິນ ດ້ວຍການສະ ເໜີທົດແທນຄ່າເສຽຫາຍຕ່າງໆ ໃນນັ້ນຮວມທັງສະພາທີ່ເປີກສາ ທີ່ຕ້ອງປະກອບດ້ວຍພວກ ປັນຍາຊົນ ທ້ອງຖິ່ນນຳ ຄວາມພະຍາຍາມຂອງພວກເຂົາລົ້ມແຫລວໄປທັງສອງຢ່າງ ເພາະສິ່ງເສດເຫລືອຈາກຄວາມ ເປັນປໍລະປັກ ຂອງພວກປັນຍາຊົນທ້ອງຖິ່ນ ແລະກໍຍ້ອນວ່າກອງທັບເຮືອອາເມລິກາ ພາໂຕອາກິນາລໂດ ກັບມາແຕ່ ສິງກະໂປ ຜ່ານທາງຮ່ອງກົງ.

ການປາກົດຕົວຄືນຂອງເຂົາ ກໍ່ໃຫ້ເກີດການປະຕິວັດຄືນມາອີກ ແຕ່ມີຄວາມຕ່າງອັນສຳຄັນ ຄື: ອາກິນາລໂດ ໄດ້ຮັບການສະໜັບສະໜຸນຢ່າງກວ້າງຂວາງ ຈາກພວກປັນຍາຊົນທ້ອງຖິ່ນ ດ້ວຍການ ມອບອຳນາດໃຫ້ແກ່ພວກເຂົາ ເຖິງແມ່ນວ່າ ຍັງມີຍາດພີ່ນ້ອງ ແລະຜູ້ສະໜັບສະໜຸນ ຈາກ ຄາວິເຕ ຫ້ອມລ້ອມຢູ່ກໍຕາມ ເຂົາຮູ້ສຶກຈາກສ່ວນເລິກຂອງຫົວໃຈ ແລະມອບການຕັດສິນໃຈທາງການເມືອງ ໃຫ້ແກ່ ປັນຍາຊົນທ້ອງຖິ່ນ ໂດຍສະເພາະແມ່ນໃຫ້ ທີ່ເປີກສາຜູ້ໃຫມ່ຊື່ ອາໂປລິນາຣິໂອ ມາບີນີ. ພວກປັນຍາຊົນ ທ້ອງຖິ່ນນອກເຂດເວ້ົາ ພາສາກາຕາລັອກ ໄດ້ຖືກຊັກຊວນເຂົ້າມາຮ່ວມຂະບວນການນຳ ເພາະຄວາມເປັນ ພາຄີ ແລະຄວາມເຊື່ອໜັ້ນ ໃນພວກຮັກຊາດທີ່ເວ້ົາພາສາກາຕາລັອກ. ເປົ້າໝາຍດັ້ງເດີມ ທີ່ຂັດກັບຂອງ ພວກຊາດນິຍົມ ເຂດ ກາຕິປູນານ ຖືກປະຖິ້ມ ໃນຂະນະທີ່ຊັບສິນສ່ວນບຸກຄົນ ໄດ້ຮັບການປະກັນ ແລະໃນ ຂະນະທີ່ສິດໃນການອອກສຽງຖືກຈຳກັດ ໄວ້ໃຫ້ແຕ່ຜູ້ມີລັກສະນະໂດດເດັ່ນ ມີຖານະທາງສັງຄົມ ແລະພຶດຕິ ກຳທີ່ໜ້ານັບຖື. ການປະກາດ ຕັ້ງລັດຖະບານຜະເດັດການແບບໂງ່ຈ້ຳ ໃນຂັ້ນຕົ້ນຂອງ ອາກິນາລໂດ ໄດ້ປັບ ປ່ຽນຢ່າງວ່ອງໄວມາເປັນການປະກາດ "ສາທາລະນະລັດ ຟິລິບປິນ" ໂດຍ ມາບີນີ ຜ້ໄດ້ຍົກຍ່ອງໃຫ້ ອາກິ ນາລໂດ ມາປະກາດເອກະລາດແຫ່ງຊາດ ໃນວັນທີ 12 ມິຖຸນາ 1893.

ລັດຖະບານໃຫມ່ ເຂົ້າຍຶດເອົາເຂດຊົນນະບົດໄວ້ໄດ້ຢ່າງໄວວາ ຈາກພວກສະເປນ, ຕັ້ງນະຄອນ ຫລວງຂອງຕົນຂຶ້ນໃສ່ເມືອງເອກຂອງແຂວງ ມາໂລໂລສ. ພາຍໃຕ້ການຊີ້ນຳ ຂອງມາບີນີ ລັດຖະບານ ຫຍັບຍ້າຍໄປ ຢູ່ບ່ອນຫວ່າງເປົ່າທີ່ເກີດຈາກຄວາມຫລົ້ມສະຫລາຍຂອງອຳນາດສະເປນ. ຢູ່ໃນບົດຂຽນຂອງ ມານີບີ ທັງໝົດ ຮວມທັງ ປຶ້ມຊື່ "True Decalogue and Constitutional Program" ມີຫົວຂໍ້ຫລັກອັນນຶ່ງ ທີ່ບັນຈຸຢູ່ທົ່ວໄປ ກ່ວ່າປະເທດຊາດຕ້ອງການ ການປະຕິວັດ ທັງຈາກພາຍນອກ ແລະພາຍໃນ ພ້ອມໆກັນ. ເຂົາເປັນຄົນອາລົມຫວານເພີດເພີນ, ບ້າອຳນາດ ແລະເປັນນັກຊາດນິຍົມຫົວຮຸນແຮງ. ເຂົາ ເຫັນຄວາມເປັນ

ປົກແຜ່ນ ແລະລະບຽບວິໄນ ເປັນອັນຕົ້ນຕໍສຳລັບການສ້າງຄົນຮຸ່ນໃຫມ່ ບໍ່ວ່າສັງຄົມໃດ, ດັ່ງນັ້ນ ເຂົາຈຶ່ງຊົມຊອບອອນຊອນ ສະພາບໍລິຫານ ທີ່ເຂັ້ມແຂງ ແລະສະພານິຕິບັນຍັດ ທີ່ອ່ອນແອ. ຢ່າງ ໃດກໍດີ, ພວກປັນຍາຊົນ ທ້ອງຖິ່ນສ່ວນຫລາຍຍັງສົງໄສ ໃນອຳນາດ ຂອງ ອາກິນາລໂດ ຢູ່ ແລະນິຍົມສະພານິຕິບັດຍັດ ທີ່ເຂັ້ມແຂງ ໃນຖານເປັນພາຫະນະ ອັນຫນ້າຫມັ້ນໃຈ ສຳລັບການຄວບຄຸມ ຂອງພວກເຂົາ. ຕົວຢ່າງ ເຟລິເປ ຄາລເດຣອນ ຢ້ານວ່າ "ອົງປະກອບດ້ານການທະຫານ ເຊິ່ງເກືອບບໍ່ຮູ້ເລື່ອງຫຍັງເລີຍນັ້ນ ຈະຂຶ້ນມາຄອບຄອງ" ເຂົາຈຶ່ງຢາກຈະເຫັນທະຫານຕົກເປັນຝ່າຍເປັນກາງໂດຍ"ລະບອບຄະນາທິປະໄຕ ອັນສ່ອງໃສ "ເມື່ອເຫັນວ່າ ສະພາອາດຈະປະກອບດ້ວຍ ບຸກຄົນຜູ້ສຫລາດສ່ອງໃສທີ່ສຸດຂອງຊາດ".

ຄຳຖາມ ຫັນມາສູ່ເລື່ອງທີ່ວ່າ ພວກປັນຍາຊົນທ້ອງຖິ່ນ ເຊິ່ງຖືກ ອາກິນາລໂດ ສັ່ງໃຫ້ປະຜຶດ ຄືກັບສະພານິຕິບັນຍັດ ຢູ່ ມາໂລໂລສ ນັ້ນ ໄດ້ຮັບມອບສິດ ຮ່າງລັດຖະທຳມະນູນຫລືບໍ່. ຢູ່ໃນຈຳນວນຜູ້ແທນເຫລົ່ານັ້ນ ມີ ນັກກົດຫມາຍ (ທະນາຍຄວາມ) 43 ຄົນ, ທ່ານຫມໍ 18 ຄົນ, ແລະບຸກຄົນທີ່ມີອາຊີບອື່ນໆ ອີກຈຳນວນຫລາຍ. ກະໂຕ ມາບິນີເອງ ກໍເປັນປັນຍາຊົນທ້ອງຖິ່ນ ຈາກກຳເນີດຕ່ຳຕ້ອຍ. ຄວາມຈິງກໍຄື ຍ້ອນມີສາຍສຳພັນໃກ້ຊິດ ກັບ ອາກິນາລໂດ ແດ ແລະທ່າທີຊົ່ງເປັນນັກປາດ ຂອງເຂົາ ເອງ ຈຶ່ງເຮັດໃຫ້ເຂົາແປກຕ່າງຈາກຜູ້ຄົນສ່ວນໃຫຍ່ໄປ. ຫມາກຜົນ ທີ່ໄດ້ຮັບກໍຄື ລັດຖະທຳມະນູນທີ່ຮ່າງຂຶ້ນມາ ໄດ້ເຮັດໃຫ້ ສະພານິຕິບັນຍັດ ມີອຳນາດສູງສຸດ. ດ້ວຍການຊັກຊວນຈອບອອຍຂອງ ມາບິນີ, ທຳອິດ ອາກິນາລໂດ ປະຕິເສດການລົງນາມໃສ່ຮ່າງລັດຖະທຳມະນູນນັ້ນ ແຕ່ເມື່ອຕ້ອງປະຈັນຫນ້າກັບຄວາມບໍ່ພໍໃຈ ຂອງພວກປັນຍາຊົນສະມາຊິກສະພາ ເຂົາກໍປີ້ນການຕັດສິນໃຈຄັ້ງນີ້ ທັງໆທີ່ ມີຄຳເຕືອນຈາກ ມາບິນີ ທີ່ຊູ່ວ່າ ຈະລາອອກ. ມາບິນີ ຜູ້ຮູ້ໂຕດີ ວ່າ ເຂົາເສຽທີແລ້ວ ຈຶ່ງຍອມຮັບ ດ້ວຍຄວາມບໍ່ເຕັມໃຈເທົ່າໃດ ແລ້ວຮ່າງທີ່ມີລັກສະນະ ປະນີປະນອມ ກໍຖືກປະກາດອອກໃຊ້ ໃນວັນທີ 21 ມັງກອນ ປີ 1899.

ໃນລະຍະຫົກເດືອນ ທີ່ຊາວ ຟິລິບປິນ ກຳລັງສ້າງຕັ້ງລັດຖະບານຢູ່ນັ້ນ ພວກອາເມລິກາ ກໍພວມອະພິປາຍກັນວ່າ: ຄວນຫລືບໍ່ ທີ່ເຮົາຈະຕ້ອງຮຽກຮ້ອງໃນການເຈລະຈາ ສັນຕິພາບໃນອະນາຄົດ ນຳສະເປນ ເພື່ອຍຶດຄອງເອົາຟິລິບປິນ. ທິດສະດີ ຂອງຮ້ອຍເອກ ອັນເຟຣດ ໂທເຍີມາຮານ, ລັດທິ ນິຍົມດາວິນ ທາງສັງຄົມ, ສະເຫນດົ້ງດູດຂອງຕະຫລາດຈີນ ແລະຄວາມກ້າແກ່ນອວດເກ່ັງ ຂອງຄະນະເຜີຍແຜ່ສາສະຫນາ ລ້ວນແຕ່ສິ່ງເສີມພັກຮີປຸຍບລິກຄັນ ໃນ ວໍຊິຕັນ ອອກຫນ້າປ້ອງກັນ ຍຶດຄອງ ໃນສິ່ງທີ່ເປັນມາແລ້ວ. ໃນຂະນະທີ່ ຄິບລິງ (Kipling) ໄດ້ເລັ່ງໃຫ້ອາເມລິກາ ຮັບເອົາພາລະຂອງຄົນຜິວຂາວ, ທ່ານ ດູລີ່ ໄດ້ບັນທຶກໄວ້ວ່າ ເປັນເວລາບໍ່ທັນຮອດສອງເດືອນຊ້ຳ ທີ່ຄົນອາເມລິກາ ໄດ້ຮູ້ວ່າ ຟິລິບປິນ ເປັນຫມູ່ເກາະດອນ ຫລື ສິນຄ້າກະປ໋ອງກັນແທ້. ຫລັງຈາກໄດ້ທົດສອບອາລົມ ຂອງປະຊາຊົນຊາວເມືອງແລ້ວ ປະທານປະເທດ ຄື ທ່ານ ວິນລຽມ ແມກແກນລີ ໄດ້ປະກາດວ່າ ເພິ່ນບໍ່ມີທາງເລືອກອື່ນໃດ ນອກຈາກ ຈະໃຫ້ການສຶກສາແກ່ ພວກຟິລິບປິນ ແລະຍົກລະດັບຊີວິດ ແລະເຮັດໃຫ້ຈະເລີນ ທັງ ເຮັດໃຫ້ເຂົາເຈົ້າຫັນມາເປັນຄຣິຕສະຕຽນ ແລະໃນນາມຂອງພະເຈົ້າ ຈະເຮັດທຸກສິ່ງທຸກຢ່າງດີທີ່ສຸດສຳລັບພວກເຂົາ...ໂດຍມີຈຸດຢືນທີ່ວ່າ "ບາດກ້າວເດີນແຫ່ງເຫດການພວມປົກຄອງ ແລະຄວບຄຸມປົກຄອງ..." ພຶດຕິກຳຂອງເຂົາກໍຄື, ເຂົາບຳລຸງກອງກຳລັງເຮືອຣົບຂອງ ດິວເວ ຈົນວ່າຊາວອາເມລິກາ ມີກຳລັງທະຫານຫລາຍກວ່າ 10,000 ຄົນ ຢູ່ອ້ອມ ອ່າວ ມະນີລາ. ຊາວສະເປນ ຢູ່ມະນີລາ ເລືອກຍອມຈຳນົນ ອາເມລິກາ ຫລາຍກວ່າ ການຍອມຈຳ ນົນ ຕໍ່ກອງທະຫານ ຟິລິບປິນ ຂອງ ອາກິນາລໂດ ຈຶ່ງພ້ອມກັນນຳພາການຕໍ່ສູ້ແບບງ່າຍດາຍແລ້ວ ເຫດ ການກໍອະວະສານລົງໃນວັນທີ 13 ສິງຫາ ພ້ອມດ້ວຍ ການເສຽໄຊໃຫ້ ດິວອີ. ກຳລັງຂອງຟິລິບປິນ ທີ່ປິດລ້ອມຕົວເມືອງຢູ່ ຖືກຂວາງໄວ້ບໍ່ໃຫ້ເຂົ້າໄປໃນຕົວເມືອງ ແລ້ວຄວາມເປັນພັນທະມິດອັນຜ່ອຍຜຸ ລະຫວ່າງ ອາເມລິກາ ກັບຟິລິບປິນ ພັງທະລາຍລົງ ເມື່ອສັດຕູຕົວດຽວກັນຂອງພວກເຂົາ ຄືສະເປນ ຍອມຈຳນົນ.

ແມກ ຄິນລີ ແຕ່ງຕັ້ງຄະນະຜູ້ແທນໄປຮ່ວມປະຊຸມເຈລະຈາສັນຕິພາບຢູ່ປາຣີ ກັບ ສະເປນ, ເຂົາ ການປະຕິເສດທີ່ຈະພົບປະກັບຕົວແທນ ຂອງ ອາກິນາລໂດ ແລະການທີ່ຜູ້ບັນຊາການພາກສະຫນາມ ຂອງເຂົາ ໄດ້ສະແດງຈະແຈ້ງ ໃຫ້ທຸກຄົນ ໃນມາໂລໂລສ ເຫັນວ່າ ອຳນາດອັນເຂັ້ມແຂງ ຂອງອາມາມິ

ຄົມນຶ່ງ ພວມຄືບເຂົ້າມາແທນບ່ອນ ອັນທີ່ອ່ອນແອ. ຢ່າງໃດກໍດີ, ໂດຍບໍ່ຄາດຄຶດມາກ່ອນ, ພວກຟິລິບປິນ ໄດ້ຮັບກຳລັງໃຈ ຈາກຄວາມຮູ້ສຶກຕໍ່ຕ້ານຈັກກະພັດ ທີ່ພວມທະວີຂຶ້ນໃນ ອາມລິກາ. ການອະພິປາຍ ໃນ ສະພາຄອງແກຣສ ແລະພາຍໃນປະທດ ໄດ້ສ້າງພັນທະມິດທີ່ແປກໃຫມ່ຂຶ້ນ. ໂດຍປະສົມປະສານລັດທິ ອຸດົມການນິຍົມ ບວກກັບລັດທິຈຳແນກເຊື້ອຊາດໃສ່ກັນ, ພວກຕໍ່ຕ້ານຈັກກພັດ ໄດ້ເຮັດໃຫ້ສັງຄົມອາເມ ລິກາຈຳນວນຫລາຍ ຫັນເຫໄປຕາມເສັ້ນທາງທີ່ຜູ້ນຳພັກ ຣີພັບບລິກກັນ ບໍ່ຄາດຝັນ. ໃນຫັນໃດ ແມກແຄນລີ ກໍຕົກຢູ່ໃນທ່າຮັບປ້ອງກັນຕົນເອງ ໂດຍບໍ່ແນ່ໃຈວ່າຈະໄດ້ສຽງສະໜັບສະໜຸນໃນສະພາ ຮອດ 2/3 ຫລືບໍ່ ເພື່ອ (ໃຫ້ສັດຕະຍາບັນ)ຮັບຮອງສັນຍາສັນຕິພາບ ໃນສະພາສູງຂອງສະຫະລັດ, ເຂົ້າສັ່ງ ການໃຫ້ຜູ້ບັນຊາການໃນ ຟິລິບປິນ ສັນຍາກັບຊາວຟິລິບປິນວ່າ ຈະໃຫ້ລະບອບປົກຄອງ ແບບ "ກົນຍຶດ ຢ່າງເມດຕາ." ຢ່າງໃດກໍດີ ສຳລັບຊາວຟິລິບປິນ ແລ້ວ ຄຳໝັ້ນສັນຍານັ້ນ ກໍເປັນພຽງການ ສະແດງອອກຢ່າງຈະແຈ້ງ ເຖິງເຈດຕະນາລົມ ແທ່ງລັດທິບຽດຍຶດ ຂອງ ແມກ ເຄນລີ ເທົ່ານັ້ນ. ໃນວັນທີ 4 ທັນວາ 1899, ພາຍໃຕ້ສະພາບການຜິດຖຽງ ຂັດແຍ່ງກັນມາດົນເຊັ່ນນັ້ນ ການຕໍ່ສູ້ຈຶ່ງ ລະເບີດຂຶ້ນ, ພວກອາເມລິກາ ບໍ່ໄດ້ເຮັດຫຍັງຈິງຈັງເພື່ອຢຸດຣົບ ກັນເປັນການຊົ່ວຄາວ. ອີກສອງມື້ຕໍ່ມາ ພາຍຫລັງ ໄດ້ໄຊຊະນະຢ່າງຫມິ່ນໆ ເໜືອພວກຕໍ່ຕ້ານຈັກກະພັດ ແລະຂໍ້ຮຽກຮ້ອງປະຊາທິປະໄຕ ແລ້ວ, ສະພາສູງຂອງອາເມລິກາ ກໍຕັດສິນໃຈເລືອກຄອບຄອງ ຟິລິບປິນ ຕໍ່ໄປ ດ້ວຍການຕົກລົງເຮັດສົນທິ ສັນຍາສັນຕິພາບກັບ ສະເປນ. ໄຊຊະນະອັນຫມິ່ນມໍ່ ຂອງຝ່າຍຈັກກະພັດ ຄັ້ງນີ້ ມີສຽງລື່ນແຕ່ສຽງດຽວ ເທົ່ານັ້ນ.

ການແປຄວາມຫມາຍ ການຕັດສິນໃຈ ມາເປັນພາກປະຕິບັດ ພິສູດວ່າ ທັງເປັນການສິ້ນເປືອງ ທັງຫນ້າອັບອາຍ. ພັນທະພາບປັນຍາຊົນທ້ອງຖິ່ນ ກັບ ອາກິນາລໂດ ລະດົມຜູ້ຄົນ ຈາກຫລາຍພາກ ສ່ວນອອກມາເຄື່ອນໄຫວໄດ້ຫລາຍກວ່າ ທີ່ເຄີຍເຂົ້າຮ່ວມການປະຕິວັດ ປີ 1896 ຊ້ຳອີກ. ໃນຂະນະທີ່ ກອງທະຫານ ອາເມລິກາ ສາມາດມີໄຊເໜືອກອງທະຫານ ຟິລິບປິນນັ້ນ ພວກເຂົາຊ້ຳຖືກຫລອນຕີ ຢ່ໍມຢູ ດ້ວຍວິທີການແບບກອງໂຈນ ອັນເປັນວິທີການນຶ່ງຂອງສົງຄາມປົດປ່ອຍຊາດ. ເມື່ອອາເມລິກາ ຕົກ ຄ້າງຢູ່ກາງສະໜາມຣົບ ທັງທີ່ເປັນຄວາມຈິງ ທັງທີ່ອຸປະມາຂຶ້ນມາເອງ ຝ່າຍບໍລິຫານຂອງພັກ ຣີປຸຍບລິກ ກໍຫວັ່ນວິຕົກສຳລັບຊາຕາກຳທາງການເມືອງ ຂອງຕົນເອງ, ພວກເຂົາຮູ້ວ່າ ພັກປະຊາທິ ປະໄຕ ພວມວາງແຜນທີ່ຈະໃຊ້ລັດທິຕໍ່ຕ້ານຈັກກະພັດ ເປັນຈຸດໃຈກາງ ຂອງການໂຄສະນາປຸກລະດົມຫາ ສຽງສຳລັບການເລືອກຕັ້ງປະທາທິບໍດີໃນອີກບໍ່ດົນ.

ອາເມລິກາໄດ້ທຳລາຍກອງກຳລັງຕໍ່ຕ້ານ ຂອງຊາວຟິລິບປິນ ໂດຍສ້າງຄວາມແຕກແຍກ ໃຫ້ ແກ່ພັນທະອັນຜ່ອຍບາງ ລະຫວ່າງພວກປັນຍາຊົນທ້ອງຖິ່ນ ກັບສະຫມັກພັກພວກຢູ່ຊັ້ນແຂວງຂອງ ອາ ກິນາລໂດ. ຈາກອບ ເຊີຣ໌ແມນ ຫົວຫນ້າຄະນະກຳມາທິການຂອງປະທາບາທິບໍດີ ທີ່ຫາກໍມາຮອດ ໃຫມ່ໆໃຫ້ສັນຍາວ່າ ອາເມລິກາ ຈະຕ້ອງຕອບສະໜອງຕາມທັດສະນະ ແລະຄວາມມຸ່ງຫວັງ ຂອງຊາວ ຟິລິບປິນ ຜູ້ມີການສຶກສາ ໂດຍການສ້າງຕັ້ງລັດຖະບານຊຸດໃຫມ່ໃຫ້. ຂ່າວຄາວອັນນີ້ ເປັນທີ່ເຂົ້າໃຈກັນ ຢ່າງຈະແຈ້ງ. ໃນຂະນະທີ່ມັນບໍ່ງ່າຍເລີຍ ທີ່ຈະປະກາດແຕ່ພຽງວ່າ ພວກປັນຍາຊົນທ້ອງຖິ່ນທັງຫມົດ ໄດ້ກາຍເປັນຄົນນິຍົມອາເມລິກາ(Americanistas) ຄວາມຈິງກໍຄືວ່າ ຂໍ້ສະເໜີຂອງ ອາເມລິກາ ໄດ້ເຮັດ ໃຫ້ຂໍ້ຕົກລົງດ້ວຍການຍອມຈຳນົນຂອງອາກິນາລໂດ ຕໍ່ພວກປັນຍາຊົນທ້ອງຖິ່ນຢ່ອນຍານໄປ. ອາເມລິກາ ສະເໜີໃຫ້ມີການປະຊຸມຕົກລົງກັນ; ມາບີນີ ໃນຖານະເປັນລັດຖະມຸນຕີກະຊວງການຕ່າງ ປະເທດແທ້ໆ ແລະເປັນນາຍົກລັດຖະມຸນຕີເປັນຜູ້ຮັບຫນ້າທີ່ຕໍ່ຮອງອັນຫນັກຫນ່ວງ. ເມື່ອຜູ້ແທນ ເຈລະຈາ ຂອງເຂົາ ສະແດງຕົວວ່າເຂົ້າຂ້າງອາເມລິກາຫລາຍ ເຂົາກໍ່ຖືກຈັບ. ພວກປັນຍາຊົນທ້ອງຖິ່ນ ເຊິ່ງຢູ່ໃນຕຳແຫນ່ງ ເໜືອກວ່າ ໃນສະພານິຕິບັນຍັດ ໄດ້ບັງຄັບໃຫ້ ອາກິນາລໂດ ປົດມານີບີອອກ ແລະເອົາຜູ້ສະຫນັບ ສະຫນຸນ ການປະນີປະນອມ. ພວກນາຍພົນ ທະຫານ ທີ່ຢູ່ອ້ອມຂ້າງ ອາກິນາລໂດ ຜູ້ສຳຄັນກວ່າຫມູ່ ຄື ແອນໂຕນິໂອ ລູນາ ເອີ້ນ ປາຕິຣ໌ໂຣ ວ່າ ຜູ້

ທໍລະຍົດ. ເມື່ອອຳນາດທາງການທະຫານຂອງອາເມລິກາ ຫລາຍຂຶ້ນ ແລະເມື່ອລັດຖະບານຂອງ ສາທາ ລະນະລັດຟີລິບປິນ ຖືກຂັບໜີຈາກບ່ອນນຶ່ງ ໄປບ່ອນນຶ່ງ, ພວກປັນຍາຊົນທ້ອງຖິ່ນ ກໍເລີ່ມຫລົບໜ້າ ໄປໂດຍໄວ ແລະກັບຄືນໄປ ມານິລາ. ນາຍພົນລູນາ ຜູ້ໃຈແຂງ ບໍ່ມັກການປະນີປະນອມ ທັງເປັນນຶ່ງ ໃນບັນດາປັນຍາຊົນທ້ອງຖິ່ນຈຳນວນໜ້ອຍດຽວ ໃນວົງການທະຫານ ໄດ້ພົ້ນເດັ່ນຂຶ້ນເປັນທາງເລືອກນຶ່ງ ຂອງການນຳພາໃນຂະບວນການສາທາລະນະລັດ. ເຂົາສ້າງສະຖານະການຍົ່ມຢູ່ ທີ່ ອາກິນາລໂດບໍ່ສາ ມາດໃຫ້ອະໄພໄດ້, ລູນາ ຖືກພັກພວກຂອງອາກິນາລ ໂດຍິງຢ່າງບໍ່ຮູ້ສາເຫດແທ້ຈິງ. ມານີບີ ຕູ້ຫາ ອາກິ ນາລໂດ ຢ່າງເປີດເຜີຍວ່າ ເປັນຜູ້ສັ່ງການຂ້າ ລູນາ. ຢ່າງໃດກໍດີ ບໍ່ວ່າເລື່ອງນີ້ຈະເປັນຈິງ ຫລືບໍ່ ການ ຕາຍຂອງເຂົາກໍໄດ້ເຮັດໃຫ້ການປະຕິວັດຍຸຕິລົງ. ອາກິນາລໂດ ເຖິງວ່າບໍ່ທັນຖືກຈັບໄດ້ໃນລະຍະນຶ່ງ ກໍໄດ້ ຕົກເປັນຜູ້ຮ້າຍ ຫລົບລີ້ໄປເລື້ອຍໆ ແລະ ຖືກແຍກປ່ຽວອອກຈາກອຳນາດທັງປວງ.

ຄວາມເຄັ່ງຕຶງ ລະຫວ່າງພວກປັນຍາຊົນທ້ອງຖິ່ນ ກັບ ອາກິນາລໂດ ບໍ່ພຽງແຕ່ເປັນການຕໍ່ ສູ້ທາງດ້ານຊົນຊັ້ນເທົ່ານັ້ນ. ເພື່ອສິ່ງທັງປວງ ມັນມີການຊ່ວງເສັງອັນນຶ່ງລະຫວ່າງສອງໂລກະທັດ ຄື ພວກຄົນໃນເມືອງ ຊາວເມືອງໃຫຍ່ ຄົນມີການສຶກສາ ສູ້ຢັນກັບຄົນຊົນນະບົດ ຜູ້ໄຮ້ມານຍາ ແລະ ຊື່ຈ້າ. ອາກິນາລໂດສູນເສຽການຄຸມອຳນາດ ຍ້ອນເຂົາຂາດປະສົບການ, ພວກປັນຍາຊົນທ້ອງຖິ່ນ ອ້ອມລ້ອມ ເຂົາຢູ່ ແຕ່ໃນສາຍຕາຂອງເຂົາ ພວກນັ້ນເປັນຄົນໃນເມືອງຜູ້ຮັ່ງມີ, ເປັນຄົນທີ່ນິຍົມຊົມຊອບຕາເວັນຕົກ ຫລາຍຈົນຂາດຄວາມໃກ້ຊິດພົວພັນກັບປະຊາຊົນ ແລະຄວາມເປັນຈິງຕາມປະເພນີ. ສຳລັບພວກປັນຍາ ຊົນທ້ອງຖິ່ນເອງ ພວກເຂົາເບິ່ງ ອາກິນາລໂດ ວ່າເປັນຊາວນາຜູ້ເຊີ້ຊ້າເຫງີກທາງາກ. ພວກເຂົາຍອມ ຮັບໃນຄວາມຍຶດໝັ້ນຕໍ່ການສ້າງພາບສາມັນຊົນຂອງເຂົາ ແຕ່ຍ້ອນຍັງມີທັດສະນະແບບ ຄົນໃນເມືອງ ແລະແບບສາກົນນິຍົມ ພວກເຂົາຈຶ່ງຄຶດວ່າ ມັນເປັນຄວາມປ່ອງບ້າອ້ອຍຕ້ອຍ ທີ່ຄຶດຕໍ່ຕ້ານກັບ ອາເມ ລິກາອີກຕໍ່ໄປ ໃນເມື່ອມັນເປັນໂອກາດອັນຍິ່ງໃຫຍ່ ບໍ່ແມ່ນແຕ່ສຳລັບຕົນເອງເທົ່ານັ້ນ ພວກເຂົາ ເຫັນວ່າ ມັນແມ່ນຜົນປະໂຫຍດອັນປະເສີດສຸດ ສຳລັບປະເທດຊາດນຳ. ແທ້ຈິງແລ້ວພວກອາເມລິກາ ໄດ້ຕົກລົງ ກັບພວກປັນຍາຊົນທ້ອງຖິ່ນຢ່າງນຶ່ງ. ຣາງວັນສຳລັບການຮ່ວມມື ແລະການເປັນພາຄີ ກໍແມ່ນ ພວກເຂົາ ໄດ້ຮັບການສະເໜີ ໃຫ້ຖົມຊຸມທີ່ສ້າງຂຶ້ນ ຍ້ອນການຖອນທະຫານອອກຂອງສະເປນ. ອາເມລິກາ ໄດ້ຈັດ ການໃຫ້ອຳນາດ ຂອງນັກບວດໂຣມັນກາໂທລິກ ຍຸຕິລົງ ຕົກລົງກຳຈັດຂອບເຂດອານາເຂດ ແລະຮັບປະ ກັນ ຊັບສົມບັດສ່ວນບຸກຄົນ ແລະຮັບຮູ້ຄວາມເປັນຈິງໃນຊີວິດ ທາງສັງຄົມ ແລະເສດຖະກິດ ຂອງຊາວ ຟີລິບປິນ. ພວກອາເມລິກາ ກໍຕ້ອງການ ພວກປັນຍາຊົນທ້ອງຖິ່ນ ເພື່ອຍຸຕິສົງຄາມ ທັບມ້າງການຕໍ່ ຕ້ານ ແລະສະແດງຄວາມມີນ້ຳໃຈເຜື່ອແຜ່ຜູ້ອື່ນ ຂອງຊາວອາເມລິກາ. ພວກປັນຍາຊົນທ້ອງຖິ່ນ ທັນ ໜ້າມາຫາ ອາເມລິກາ ເພື່ອບັນລຸຄວາມຍິ່ງໃຫຍ່ທາງດ້ານການເມືອງ, ການຄວບຄຸມສັງຄົມ ແລະ ຄວາມປອດໄພທາງດ້ານເສດຖະກິດ. ທັງສອງຝ່າຍ ຕ່າງກໍໄດ້ຮັບຫມາກຜົນເທົ່າໆກັນ ແລະກໍບໍ່ມີຝ່າຍໃດ ຜິດຫວັງເລີຍ.

ສົງຄາມຟີລິບປິນ-ອາເມລິກາ ຢູ່ໃນໝູ່ເກາະດອນ ກັບການໂຕ້ແຍ່ງກັນ ເລື່ອງຕໍ່ຕ້ານຈັກກະພັດ ປະສົມ ປະສານເຂົ້າກັນ ເພື່ອຜັນປ່ຽນໄປຢ່າງວ່ອງໄວ ໄປຕາມຈຸດປະສົງຂອງອາເມລິກາ. ບໍ່ວ່າຄວາມໄຝ່ຝັນ ຂອງນັກຂະຫຍາຍອານາເຂດຮຸ່ນທຳອິດ ເປັນແບບໃດ, ມາຮອດ ປີ 1900 ພັກສາທາລະນະລັດ ນິຍົມ (ຣີປຸຍພລິກກັນ) ກໍໄດ້ກ້າວມາເຖິງນະໂຍບາຍການຍຸບລັດທິຈັກກະພັດນິຍົມໂດຍຕົນເອງ. ພວກອາເມ ລິກາ ເຫັນວ່າພາລະກິດຂອງພວກເຂົາ ໃນການໃຫ້ການອົບຮົມ ຄຸ້ມຄອງ ແບບນັ້ນ ໃນອີກບໍ່ດົນ ພວກ ຟີລິບປິນ ກໍຈະສາມາດປົກຄອງຕົນເອງ ແລະເປັນເອກະລາດ. ບໍ່ວ່າ ໂດຍປາສະຈາກຄວາມຜິດ ຫລື ຄວາມສະຫລາດສະຫລຽວກໍຕາມ ຊາວອາເມລິກາ ໄດ້ວາງຣາກຖານລັດທິຈັກກະພັດນິຍົມຂອງຕົນ ດ້ວຍການມອບຜົນປະໂຫຍດ ທີ່ຈະໄດ້ຈາກລະບອບປະຊາທິປະໄຕ ແບບອາເມລິກາ ໃຫ້ແກ່ ຟີລິບປິນ. ຊູມານ ຂຽນໄວ້ວ່າ "ຊາຕາກຳຂອງເກາະດອນ ຟີລິບປິນ ບໍ່ແມ່ນລັດ ຫລື ອານາເຂດ... ແຕ່ເປັນ ສາທາລະນະລັດລູກຂອງພວກເຮົາ-ແມ່ນການເກີດເສລີພາບໃຫມ່ເທິງດິນແດນອີກຟາກນຶ່ງຂອງ ມະຫາ

ສະຫມຸດ ປາຊິຟິກ" ເຊິ່ງຄົງຈະຍືນດັ່ນ ເປັນດັ່ງອະນຸສອນສະຖານ ແຫ່ງຄວາມກ້າວຫນ້າ ແລະເປັນດວງ ປະທີບແຫ່ງຄວາມຫວັງ ສໍາລັບຄົນຜູ້ຖືກກົດຂີ່ ແລະຢູ່ໃນຄວາມມືດມົນ ຫລາຍລ້ານຄົນ ໃນອາຊີ. ສິ່ງທີ່ ເຊື່ອງຊ້ອນ ຢູ່ໃນຄໍາເວົ້າແບບຖ່ອມຕົນ ຂອງ ວິນລຽມ ໂຣວາຣ໌ ຕາບຟ໌ ທີ່ວ່າ "ນ້ອງຊາຍ ຜິວສີນ້ໍາ ອ້ອຍ" ແມ່ນການບັນລຸນິຕິພາວະ ຂອງຜູ້ຢູ່ພາຍໃຕ້ການປົກຄອງ. ຊາວອາເມລິກາ ເຊິ່ງຖືກຖຽງວ່າ ລັດ ຖະບານອານານິຄົມ ຕ້ອງໄດ້ໂອນອ່ອນຜ່ອນຜັນນໍາຮີດຄອງ, ຄວາມຊິນເຄີຍ ແລະແມ່ນແຕ່ຄວາມອະຄະ ຕິຂອງຊາວຟິລິບປິນ ໃຫ້ການສະຫນັບສະຫນຸນ ແກ່ລັດຖະບານໃຫ້ເຂັ້ມແຂງ ລວມສູນເຊິ່ງມີຊາວຟິລິບປິນ ຜູ້ມີການສຶກສາ ແລະຫົວຮີດເດີມ ຄອບຄອງຢູ່ ແລະພວກເຂົາກໍເປັນຜູ້ຈະຕ້ອງໄດ້ຮັບອະນຸຍາດ ໃຫ້ທະວີ ອໍານາດຫລາຍຂຶ້ນ ໃນຖານະຊາດພັດທະນາແລ້ວ.

ມາເຖິງປີ 1900 ຮູບແບບພື້ນຖານ ຂອງການພັດທະນາ ແຫ່ງຊາດ ຂອງຟິລິບປິນ ຈຶ່ງໄດ້ຮັບ ການສະຖາປະນາຂຶ້ນ. ຕະຫລອດ ສິບສອງປີຕໍ່ມາ,ທ່ານ ທາບຟ໌ ເຊິ່ງທໍາອິດເປັນຂ້າຫລວງໃຫຍ ແລະ ຕໍ່ມາໃນຖານະ ເປັນລັດຖະມຸນຕີ ກະຊວງການສົງຄາມ ແລະສຸດທ້າຍ ເປັນປະທານາທິບໍດີ, ໄດ້ກໍານົດ ຮູບຊົງຂອງນະໂຍບາຍນັ້ນ ເຂົາບໍ່ພຽງແຕ່ດໍາເນີນການເພື່ອຫລຸດຜ່ອນ" ຄວາມຂົມຂື່ນ ແລະຄວາມບໍ່ ໄວ້ເນື້ອເຊື່ອໃຈກັນ"ລົງໃຫ້ຫນ້ອຍທີ່ສຸດ ດ້ວຍການດຶງເອົາ ຄົນຟິລິບປິນ ຜູ້ມີການສຶກສາ, ຜູ້ສະຫລາດ ແລະຮັ່ງມີ ໃຫ້ມາຮ່ວມມືນໍາ ແຕ່ຍັງໄດ້ສະຫນັບສະຫນຸນພວກປັນຍາຊົນທ້ອງຖິ່ນ ຫັນປ່ຽນລັກສະນະສັງ ຄົມຂອງຊາວຟິລິບປິນ ອອກຈາກການເປັນສັງຄົມທີ່ "ນັບຖືສາສະຫນາແບບສະໄຫມກາງ" ມາເປັນສັງ ຄົມທີ່ມີ "ນັກການເມືອງ ນັກກົດຫມາຍຜູ້ທັນສະໄຫມ" ຄອບຄອງຢູ່ຫລາຍກວ່າ. ເມື່ອສ້າງຕັ້ງລັດຖະ ບານພົນລະເຮືອນຂຶ້ນໄດ້ໃນ ວັນທີ 4 ກໍລະກົດ ປີ 1901 ນັ້ນ, ທາບຟ໌ ໄດ້ຕົວແບບໂຄງສ້າງລັດຖະບານ ຟິລິບປິນ ຕາມແບບຢ່າງຂອງອາເມລິກາ. ທາບຟ໌ ບັນທຶກໄວ້ດ້ວຍຄວາມພໍອົກພໍໃຈວ່າ ຊາວຟິລິບປິນ ໂດຍສະເພາະ ຜູ້ທີ່ເຂົາຮູ້ສຶກວ່າມາຈາກຊົນຊັ້ນສູງນັ້ນ ດີໃຈນໍາລັດຖະບັນຍັດ ສະບັບປີ 1902 ຫລາຍ, ທາບຟ໌ ຍັງຍຶດຖືເອົາແບບການເລືອກຕັ້ງຂັ້ນເທດສະບານ ກັບທ້ອງຖິ່ນ ແລະຕໍ່ມາ ກໍຂັ້ນແຂວງ ແລະ ຂັ້ນຊາດນໍາອີກ. ເຂົາສະຫນັບສະຫນຸນພວກປັນຍາຊົນທ້ອງຖິ່ນ ດໍາລົງຕໍາແຫນ່ງ ໃນລັດຖະການ ດ້ວຍເງື່ອນໄຂວ່າ ຈະບໍ່ແຕ່ງຕັ້ງຄົນອາເມລິກາ ໃຫ້ເຂົ້າຮັບຕໍາແຫນ່ງໃດໆ ໃນຟິລິບປິນ ຫາກສາມາດ ຫາຄົນຟິລິບປິນທີ່ມີຄຸນວຸທິໄດ້. ດັ່ງນັ້ນ ນັບແຕ່ຕົ້ນເດືອນກັນຍາ ປີ 1902 ມາ ພວກປັນຍາຊົນທ້ອງຖິ່ນ 3 ຄົນ ກໍໄດ້ຮັບແຕ່ງຕັ້ງ ເຂົ້າເປັນຄະນະກໍາມາທິການປົກຄອງ ທີ່ມີຢູ່ເຈັດຄົນ.

ການຜຸ່ງພົ້ນຂຶ້ນ ຂອງລັດທິຊາດນິຍົມ ຟິລິບປິນ ມີຄວາມສໍາພັນແຫນ້ນຫນຽວກັບ ການພັດ ທະນາທາງດ້ານສາສະຫນາ. ນິກາຍ ໂຣມັນຄາໂທລິກ ຢູ່ໃນຫມູ່ເກາະດອນ ໄດ້ຜັນປ່ຽນໄປຢ່າງຫນ້າ ຕົກໃຈ ອັນເປັນຜົນຈາກການເປັນປໍລະປັກ ກັບການຕໍ່ຕ້ານນັກບວດສະເປນ ກັບການຍຶດຄອງ ໂດຍ ອາ ເມລິກາ. ຄຽງຄູ່ກັບການລຸກຮືຕໍ່ຕ້ານສະເປນ ນັ້ນ ໄດ້ມີຂະບວນການຊາດນິຍົມສາສະຫນາ ຕໍ່ຕ້ານກຸ່ງ ໂຣມໄປນໍາ. ໃນລະຫວ່າງສົງຄາມ ນັກບວດຫນຸ່ມຟິລິບປິນ ຮູບນຶ່ງ ຊື່ ເກຣໂກຣິໂອ ອາກລິພາຍ ໄດ້ແບ່ງ ອານະຈັກ ອອກຕາມສາຍຊົນເຜົ່າ. ໂດຍໄດ້ຮັບແຕ່ງຕັ້ງຈາກ ອາກິນາລໂດ ໃຫ້ເປັນອະນຸສາສະດາຈານ ໃຫຍ່ໃຫ້ແກ່ກອງທັບ, ອາກລິພາຍ ຖືກຂັບໄລ່ອອກຈາກສາສະນະຈັກ ໂດຍ ຄະນະນັກບວດສະເປນ, ເຖິງ ແມ່ນວ່າ ໃນຂັ້ນທໍາອິດ ເພິ່ນບໍ່ໄດ້ມີເຈດຕະນາທີ່ຈະແຕກຫັກກັບ ໂຣມ, ແຕ່ຄວາມດື້ດ້ານຂອງສໍານັກ ວາຕິກັນ ແລະພັນທະພາບທີ່ພວມປາກົດຂຶ້ນລະຫວ່າງ ມາດຣິດ ກັບ ໂຣມ ເຮັດໃຫ້ ອາກລິພາຍ ກັບ ນັກບວດຮູບອື່ນໆ ອີກຫລວງຫລາຍ ຫັນມາສ້າງຕັ້ງສາສນະຈັກແຫ່ງຊາດຟິລິບປິນຂຶ້ນ. ມາຮອດປີ 1902 ຂະບວນການກໍກາຍເປັນອົກເກລເຊຽ ແຫ່ງ ເອກະລາດ ຟິລິບປິນ ໂດຍມີ ອາກລິພາຍ ເປັນ ລາຊາຄະນະ ຫລື ອາກບິຊອບ. ນິກາຍຂອງ ອາກລິພາຍ ໄດ້ຖົມຄວາມຫວ່າງເປົ່າທາງສາສະຫນາ ທີ່ເກີດຂຶ້ນຍ້ອນ ການຖອນພະນັກບວດສະເປນອອກໄປ. ພະນັກບວດຟິລິບປິນ ຫລາຍຮູບ ໄດ້ຍຶດຄອງໂບດ ເຊິ່ງແຕ່ເກົ່າ ແມ່ນພະສະເປນປົກຄອງຢູ່ ແລະເຂົ້າຮ່ວມກັບໂບດໃຫມ່. ບໍ່ເທົ່າໃດປີ ກໍສາມາດປະກາດໄດ້ວ່າ ມີສະມາ ຊິກ ຮອດ 1.5 ລ້ານຄົນ ຫລື 25 % ຂອງ ປະຊາກອນຄຣິດສ໌ ຂອງປະເທດ.

ສາສນະຈັກໂຣມັນ ເຊິ່ງຕົກເປັນຝ່າຍຮັບ ຢ່າງຈະແຈ້ງ ໄດ້ພະຍາຍາມຟື້ນຟູສະຖານະຄືນ ສຳນັກວາຕິກັນ ຕົກລົງ ທີ່ຈະປັບປ່ຽນຄະນະສົງ ໃຫ້ເປັນຂອງ ຟິລິບປິນ ແລະອາເມລິກາ ຈຶ່ງຮຽກ ພະ ສະເປນກັບຄືນ ໂດຍຍອມກົ້ມຫົວໃຫ້ແກ່ຄວາມເປັນຈິງກ່ຽວກັບການແບ່ງແຍກວັດ ແລະລັດ ອອກຈາກ ກັນ, ຕົກລົງຈຳກັດກິດຈະກຳຂອງນັກບວດ ໃຫ້ເປັນອຽກທາງສາສະໜາ ກັບ ສາທາລະນະກຸສົນ ແລະ ອັນທີ່ສຳຄັນກວ່າໝູ່ໝົດ ກໍແມ່ນການຮັບເອົາຂໍ້ສະເໜີ ຂອງ ທາບຟ໌ ທີ່ຈະຊື້ເອົາທີ່ດິນວັດ ແລະ ແບ່ງຂາຍອອກ ເປັນຕອນນ້ອຍໆ ໃຫ້ກັບຜູ້ເຊົ່າຢູ່ໃນປັດຈຸບັນນັ້ນ ນັບວ່າ ເປັນການປະຕິຮູບທີ່ດິນ ເຊິ່ງ ອາເມລິກາເອງ ກໍບໍ່ເຄີຍໄດ້ເຫັນມັນ ສຳເລັດຈັກເທື່ອ. ໂດຍການຖອນຕົວອອກຈາກຖານະ ອັນເປີດ ແປນຂອງຕົນ ໃນການເປັນເຈົ້າທີ່ດິນຂີ້ໂຫດໜ້າຊັງ ວັດສາສນະຈັກ ໄດ້ປົດປ່ອຍຕົນເອງອອກຈາກ ພາລະອັນໜັກໜ່ວງ. ໃນລະຫວ່າງຊຸມປີດຽວກັນນັ້ນ ສາສະນະຈັກ ກໍໄດ້ຊອກຫາວິທີການ ເພື່ອດຶງດູດ ເອົາສະມາຊິກເກົ່າຂອງຕົນ ຈຳນວນນຶ່ງຄືນມາ ຈາກຂະບວນການ ອາກລີພາຍ. ໃນປີ 1906 ສານສູງ ສຸດຂອງຟິລິບປິນ ຂອງພວກຫົວນິຍົມຮີດເດີມ ອັນປະກອບດ້ວຍ ອາເມລິກາ ກັບ ປັນຍາຊົນ ທ້ອງຖິ່ນ ໄດ້ຕັດສິນວ່າ ຊັບສິນຂອງພະໂຣມັນຄາໂທລິກທັງໝົດ ທີ່ຖືກພວກ ອາກລີພາຍ ຍຶດໄປນັ້ນ ຈະຕ້ອງ ຖືກສົ່ງຄືນໃຫ້ແກ່ທາງວັດໂບດ. ຜົນທີ່ເກີດຂຶ້ນ ກໍແມ່ນພວກອາກລີພາຍ ຕ້ອງໄດ້ຫາບ່ອນຕັ້ງກອງບັນຊາ ການໃໝ່ ຂະນະທີ່ທາງນັກບວດ ໂຣມັນຄາໂທລິກ ໄດ້ກັບມາຄອບຄອງຫິນກ້ອນໜັກຂອງວັດ. ເຖິງ ແມ່ນວ່າມີຊາວ ຟິລິບປິນ ຈຳນວນຫລາຍ ນັບຖື ພຣະນິກາຍ ອາກລີພາຍ ແຕ່ກໍຍັງມີອີກຫລາຍ ຄືກັນ ທີ່ຍັງຄົງສືບຕໍ່ນັບຖືພຣະ ຢູ່ບ່ອນທີ່ພວກເຂົາເຄີຍນັບຖືມາແລ້ວ ດັ່ງນັ້ນ ຈຶ່ງໄດ້ພາກັນກັບມາຫາ ນິກາຍ ໂຣມັນຄາໂທລິກ. ມາຮອດປີ 1918 ຜູ້ນັບຖື ນິກາຍ ອາກລີພາຍ ໃນໝູ່ປະຊາກອນຄຣິດສ໌ ໄດ້ຫລຸດລົງ ເປັນປະມານ 13 %. ອາກລີພາຍ ເອງ ກໍໄດ້ພະຍາຍາມຫຍັບຍ້າຍຖານະຂອງຕົນຂຶ້ນ ສູ່ຖານະອຳນາດ ທາງການເມືອງ ແຕ່ຄືກັນກັບ ອາກີນາລໂດ ເຂົາບໍ່ສາມາດຊ່ວງເສັງຕໍ່ສູ້ກັບ ການຫັນປ່ຽນເປັນຕົວ ເມືອງ ແລະຄວາມສະຫລັບຊັບຊ້ອນຂອງພວກນັກກົດໝາຍ ນັກການເມືອງ ພວກຊ້ຳລັດຖະການ ແລະ ຜູ້ຄົນມືອາຊີບ ຢູ່ໃນຊຸມຊົນປັນຍາຊົນໃນຍຸກນັ້ນໄດ້. ອຳນາດແຫ່ງໂລກສາສະນະຈັກ ເລີ່ມຫລຸດໜ້ອຍ ຖອຍລົງແລ້ວ ປະເທດຟິລິບປິນ ກໍກາຍເປັນປະເທດຂອງ ຄະລຶຫັດ.

ຄວາມສຳເລັດ ທີ່ພວມປາກົດຂຶ້ນ ໂດຍນະໂຍບາຍຂອງ ອາເມລິກາ ຢູ່ ຟິລິບປິນ ເລື່ອມບັງ ຄວາມຂັດແຍ່ງ ອັນຕົ້ນຕໍຂອງມັນ. ເພື່ອຍຸຕິການຕໍ່ຕ້ານຂອງຝ່າຍຊາດນິຍົມຕໍ່ການປົກຄອງ ຂອງ ອາເມລິກາ ແລະເພື່ອປົດປ່ອຍຕົນເອງ ໃຫ້ຫລຸດພົ້ນອອກຈາກສະຖານະການອັນໜ້າອັບອາຍ ທາງ ດ້ານອຸດົມການ, ຫົວໜ້າພັກ ຣີພູບລິກັນ ໄດ້ສັນຍາທີ່ຈະປັບປຸງນະໂຍບາຍອານານິຄົມ ໃຫ້ສອດຄ່ອງ ກັບຄວາມຫວັງ ລົບລ້າງຄວາມອະຄະຕິຂອງພວກປັນຍາຊົນທ້ອງຖິ່ນ. ມາຮອດປີ 1908 ທາບຟ໌ ກໍສຳ ນຶກໄດ້ວ່າ ອາເມລິກາ ໜົດເປືອງໄປຫລາຍ ເພື່ອໃຫ້ໄດ້ຄວາມຮ່ວມມືຈາກພວກປັນຍາຊົນທ້ອງຖິ່ນ. ຂະນະທີ່ ໃນທາງທິດສະດີແລ້ວ ແມ່ນອຸທິດໃຫ້ແກ່ "ການປົກຄອງຕົນເອງໂດຍມະຫາຊົນ" ແລະ ເພື່ອ ຂະຫຍາຍການສຶກສາຢ່າງພຽງພໍສຳລັບມະຫາຊົນ" ເພື່ອຮູ້... ສິດທິພົນລະເມືອງ ແລະເພື່ອອຸ້ມພວກ ເຂົາໄວ້ ຕໍ່ສູ້ກັບຊົນຊັ້ນທີ່ມີອຳນາດເໜືອກວ່າ ແລະເພື່ອປະຕິບັດ ສິດທິທາງການເມືອງໄດ້ຢ່າງປອດ ໄພ", ທາບຟ໌ ຮູ້ສຶກຕົວທັນວ່າ ຄວາມຈິງແລ້ວ ນະໂຍບາຍອາເມລິກາ ອາດຈະເປັນພຽງເພື່ອລໍຄອຍ ເວລາ ໃຫ້ມີການຈັດຕັ້ງ ປະເທດຟິລິບປິນ ໂດຍຄະນາທິປະໄຕ ຫລື ໂດຍກະຖຸມພີທິປະໄຕ ຜູ້ມີສະມັດຖະ ພາບໃນການສົ່ງການລັດຖະບານ ແລະຈາກນັ້ນ ກໍມອບສົ່ງເກາະດອນໃຫ້ລັດ". ໃນການສະເໜີມອບ ອຳນາດ ໃຫ້ແກ່ພວກປັນຍາຊົນທ້ອງຖິ່ນນັ້ນ ອາເມລິກາເອງ ກໍຍອມຮັບລະບົບສັງຄົມພິເສດລະບົບນຶ່ງ ແລະຮູບແບບການຍຶດຄອງທີ່ດິນ. ຫວັງກັນວ່າ ການສຶກສາທີ່ໃນອະນາຄົດ ຈະຊ່ອຍປັບປຸງຄວາມດຸ່ນດ່ຽງ ທາງດ້ານອຳນາດຂອງເສດຖະກິດ ແລະການເມືອງ ທາບຟ໌ ສັງເກດວ່າ "ການສັ່ງສອນ ກ່ຽວກັບສິດທິ ຂອງບຸກຄົນ ຈະຕ້ອງໃຊ້ເວລາຢູ່ຫລາຍປີກ່ອນທີ່ປະເທດຊາດ ຈະກ້າວລ້ຳຄວາມສຳພັນ ແບບຂຶ້ນຕໍ່

ເຈົ້າທີ່ດິນ ເຊິ່ງໃນນັ້ນ ບັດນີ້ ຜູ້ຄົນສາມັນຈຳນວນຫລາຍ ຮູ້ສຶກຕໍ່ຜູ້ນຳທີ່ຮັ່ງມີ ແລະມີການສຶກສາຂອງ ພວກເຂົາ... ".

ດ້ວຍເຫດນັ້ນ ເຖິງແມ່ນວ່າ ເອກະລາດຊຶ່ງອາດເປັນເປົ້າຫມາຍ ຂອງນະໂຍບາຍອາເມລິກາ ມັນກໍບໍ່ສາມາດເກີດ ຂຶ້ນໄດ້ໂດຍໄວ ນອກຈາກວ່າ ຂໍ້ຜູກພັນ ອັນຕົ້ນໆຕ້ອງສອດຄ່ອງກັບການອຸທິດເພື່ອ ອຸດົມການ.

ພວກຮີປູບລິກັນບໍ່ມີເວລາຢ່າງພຽງພໍ. ພວກເຂົາສາມາດເຮັດໃຫ້ການຕໍ່ສູ້ອ່ອນເປ້ຽລົງໄດ້ພໍພຽງ ແຕ່ ດ້ວຍການໂຄນລົ້ມກົດເກນຂອງ ໂກລສວິຕຊ໌ ຄືການເອົາການເມືອງເປັນຕົວຂະຫຍາຍສົງຄາມ ດ້ວຍ ພາຫະນະອື່ນ. ພາຍໃຕ້ຄວາມເຮັ່ງຮີບຂອງສົງຄາມ ພວກເຂົາໄດ້ສົ່ງເສີມພວກປັນຍາຊົນທ້ອງຖິ່ນ ກໍ່ຕັ້ງ ພັກ ເຟເດຣາລລິສຕາຂຶ້ນ ໃນທ້າຍຊຸມປີ 1900, ພັກນີ້ ໄດ້ອອກຫນ້າອອກຕາ ປ້ອງກັນການຮ່ວມມືກັບ ອາເມລິກາ ແລະການສ້າງຕັ້ງລັດ ໃນລະຍະຕໍ່ມາ ຢູ່ພາຍໃນສະຫະລັດອາເມລິກາ. ເປໂດຣ ປາຣ໌ຕິໂນ ກັບຜູ້ອື່ນໆ ແຍກໂຕອອກຢ່າງໄວວາ ເພື່ອກໍ່ຕັ້ງພັກຂອງຕົນເອງ. ທັງສອງຝ່າຍມີຈຸດ ມຸ່ງຫມາຍສ້າງ ຖານອຳນາດ ຂອງພວກຕົນຂຶ້ນເປັນສ່ວນຕົວ ເພື່ອໃຫ້ຕົນມີບົດບາດ ວ່າເປັນຜູ້ສະຫນັບສະຫນຸນ ເອກະ ລາດອັນສົມບູນ ໃນຕໍ່ຫນ້າ. ໃນຊຸມປີທຳອິດ ພວກອາເມລິກາ ຫ້າມການສະຫນັບສະຫນຸນເອກະລາດ ຢ່າງເປີດເຜີຍ ບໍ່ວ່າໃນກໍລະນີໃດໆ ແຕ່ມາຮອດປີ 1907 ລະຫວ່າງການເລືອກຕັ້ງສະມາຊິກສະພາ ພວກນັກການເມືອງໄດ້ໂຄສະນາຊັກຊວນວ່າ ມັນແມ່ນຄວາມຮີບດ່ວນ ແລະເຮັ່ງຮ້ອນ. ທັງສອງກຸ່ມ ຮວມກັນເຂົ້າເປັນ ສະຫະພາບແຫ່ງຊາດ ແລະຊະນະການເລືອກຕັ້ງ ໄດ້ 59 ບ່ອນນັ່ງ ໃນ 80, ຍິ່ງໄປ ກວ່ານີ້ ພັກຊາດນິຍົມໃຫມ່ ຍັງໄດ້ຫວນກັບມາຫາຫົວໜ້າຫນຸ່ມໆກຸ່ມນຶ່ງ ແລ້ວແຕ່ງເອົາພວກປັນຍາຊົນ ທ້ອງຖິ່ນຮຸ່ນເກົ່າ ໄປຮັບຕຳແຫນ່ງດ້ານພິທີການ. ທ່ານ ເຊີກຣ໌ ຈີໂອ ໂອສເມນາ ໃນໄວ 29 ປີ ໄດ້ຮັບ ເລືອກເປັນໂຄສົກ ຂອງສະພາໃຫມ ຂ້າມຫນ້າ ປາເຕຣ໌ໂນ ຜູ້ທີ່ຖືກເບິ່ງວ່າເປັນ "ເປັນຫົວນິຍົມ ສະເປນ". ຄົນຮຸ່ນໃຫມ ທີ່ຫນຸ່ມກວ່າ ອອກຫນ້ານຳພາໂດຍ ອອສເມຍາ ແລະມານຸຍແອລ ເກຊອນ ກ້າວຂຶ້ນມາ ຄວບຄຸມຂະບວນການຊາດນິຍົມ ແລະຄອບງຳ ຢູ່ ໃນນີ້ຕະຫລອດເວລາ 40 ປີ ຕໍ່ມາ.

ບັນຫາຂໍກຸນແຈ ທັງຢູ່ໃນອາເມລິກາ ທັງໃນ ຟີລິບປິນ ແມ່ນການຄອງຖ້າກາລະອັນເຫມາະສົມ ສຳລັບການປະກາດເອກະລາດ. ພວກນັກຊາດນິຍົມ ເຊິ່ງຮູ້ຄຸນຄ່າທາງການເມືອງ ແຫ່ງການຮຽກຮ້ອງ ເອກະລາດແບບ ຮີບດ່ວນ ໄດ້ປົກປ້ອງເລື່ອງນີ້ ຢ່າງເປີດເຜີຍ. ຝ່າຍຄ້ານ ເຊິ່ງຕໍ່ມາ ຊີ້ນຳ ໂດຍຮວນ ຊູມູ ລອງ ໂດດເດັ່ນຂຶ້ນ ພ້ອມທັງວິທີການອັນກ້າວຫນ້າກວ່າ ເຊັ່ນດຽວກັບ ທາບຟ໌, ຊູມູ ລອງ ເຊື່ອວ່າ ເອກ ກະລາດທີ່ບໍ່ທັນສຸກງອມນີ້ ຈະພາໄປສູ່ອຳນາດແບບຄະນາທິປະໄຕຫລາຍກວ່າປະຊາທິປະໄຕ. ເຖິງຢ່າງ ໃດກໍດີ ສຽງຂອງເຂົາຜ່ານໄປ ໂດຍບໍ່ເຂົ້າຫູໃຜ ເມື່ອການຕອບໂຕ້ຂອງຝ່າຍຊາດນິຍົມ ເຮັດໃຫ້ ເອກະ ລາດ ກາຍເປັນເປົ້າຫມາຍ ທີ່ກວມລວມເອົາທຸກຢ່າງ. ບັນຫາຕົ້ນຕໍ ຈຶ່ງສ້າງຄວາມກົດດັນຫນັກຫນ່ວງ ຂຶ້ນ ພາຍຫລັງ ທີ່ ວູວໂດຣວ ວິລສັນ ໄດ້ຮັບໄຊຊະນະໃນການເລືອກຕັ້ງປະທາທິບໍດີ ອາເມລິກາ ໃນປີ 1912, ຍ້ອນວ່າ ພັກປະຊາທິປະໄຕ ກໍໄດ້ປົກປ້ອງເອກະລາດຮີບດ່ວນອັນນີ້ຢ່າງຫນຽວແຫນ້ນ. ພາຍໃຕ້ ອິດທິພົນຂອງນັກປະຊາທິປະໄຕຜູ້ກ້ອນໆ ເຊິ່ງມີບັນທຶກວ່າ ໄດ້ຕໍ່ຕ້ານລັດທິຈັກກະພັດນິຍົມ, ວິລສັນ ໄດ້ ແຕ່ງຕັ້ງ ແອຟ ບີ ຣາຣິສັນ ເປັນຂ້າຫລວງໃຫຍ່ ພ້ອມດ້ວຍຂໍ້ຊີ້ແນະ ເພື່ອທະວີກະແສການປົດປ່ອຍ ອານານິຄົມ. ຣາຣິສັນ ໄດ້ແຕ່ງຕັ້ງ ຊາວຟີລິບປິນ ເປັນສ່ວຍຫລາຍ ໃຫ້ເຂົ້າປະຈຳການ ແລະຕື່ມຜູ້ແທນ ຊາວຟີລິບປິນ ຂຶ້ນອີກ ຢູ່ໃນລະບົບລັດຖະການ ຈາກ 71 % ມາເປັນ 96 %. ຢູ່ ວໍຊິງຕັນ ປີ 1916 ພັກປະ ຊາທິປະໄຕ ໄດ້ຜ່ານກົດຫມາຍ ໂຈນສ໌ ທີ່ໃຫ້ຄຳສັນຍາວ່າ ຈະໃຫ້ເອກະລາດໄວທີ່ສຸດ ໃນທັນທີ ທີ່ຕັ້ງ ລັດຖະບານທີ່ຫມັ້ນຄົງໄດ້ ລັດຖະບັນຍັດ ຄລາກເຄ (Clarke amendment) ເຊິ່ງໄດ້ກຳນົດລະຍະເວລາໄວ້ 4 ປີ ເຂົ້າຜ່ານການໃນສະພາສູງ ແຕ່ປະລາໄຊແບບມິ່ນໆຈາກການລົງຄະແນນຂອງພວກຮີປັບລິກັນ ໃນສະພາຕ່ຳ. ເອກະລາດ ຄືດັ່ງຫຍັບມ່ເຂົ້າມາແລ້ວ ຫລັງຈາກການປະກາດຊາຕາກຳຕົນເອງຕໍ່ທົ່ວໂລກ ຂອງ ວິລສັນ ທີ່ ແວຣຊາຍ ໃນປີ 1919 ກ່ຽວກັບ ການຕັດສິນ, ແຮຣິສັນ ໄດ້ສະລະຫນ້າທີ່ ທີ່ເປີກ

ສາຂອງເຂົາ ແລະອະນຸຍາດໃຫ້ຊາວຟີລິບປິນ ດັດແປງລະບຽບກົດຫມາຍອາເມລິກາ ເພື່ອໃຫ້ຖືກກັບ ຄວາມມຸ່ງຫວັງ ຂອງ ຄົນທ້ອງຖິ່ນ. ແຮຣິສັນ ສະຫນັບສະຫນຸນຄະນະຜູ້ແທນ ເພື່ອເຈລະຈາເອກະລາດ ເຊິ່ງເດີນທາງໄປ ສະຫະລັດເມື່ອ ປີ 1919. ເຄວຊອນ ກັບ ໂອສເມຍາ ທັງທີ່ວ່າ ເຄີຍຕອບໂຕ້ທາງການ ເມືອງມາແລ້ວ ກໍຍັງບໍ່ໄດ້ຮ້ອນຮົນສົນໃຈ ນໍາເອກະລາດໃນສະເພາະຫນ້ານີ້ ເທົ່າກັບ ແຮຣິສັນ ດ້ວຍວ່າ ສິ່ງທີ່ພວກເຂົາ ຕ້ອງການເປັນການສ່ວນຕົວແທ້ໆ ແມ່ນຜົນປະໂຫຍດຈາກການປົກຄອງຕົນເອງ ໂດຍບໍ່ ມີການດຶງຖ່ວງ ຂອງເຈົ້າຫນ້າທີ່ ລະດັບສູງກວ່າຂຶ້ນໄປ. ເຄວຊອນເອງ ມີຄວາມປາຖະຫນາຢ່າງລັບໆ ທີ່ຈະຮັບເອົາລະບົບຄອມມອນແວລ (ສະຫະລາຊະອານາຈັກ) ເປັນເວລາ 25 ປີ. ການຈັດຕັ້ງແບບນັ້ນ ອາດຈະປ່ອຍ ບັນຫາເລື່ອງການປ້ອງກັນປະເທດ, ການເງິນຕາ ແລະການຄ້າເສລີ ໃຫ້ແກ່ພວກ ອາເມ ລິກາໄດ້ ຂະນະທີ່ອໍານາດທາງການເມືອງ ສັງຄົມ ແລະເສດຖະກິດ ໃຫ້ຢູ່ໃນກໍາມືຂອງຊັ້ນນໍາຢູ່ ມະນີລາ ຢ່າງປອດໄພ. ເຖິງຢ່າງໃດກໍດີ ເຄວຊອນ ຫວິດພົ້ນອອກຈາກຄວາມຂາຍຫນ້າ ໃນເລື່ອງການເຜີຍແຜ ແຜນການຂອງເຂົາ ດ້ວຍເຫດບັງເອີນ ຂອງຜົນການເລືອກຕັ້ງ ໃນອາເມລິກາ. ຖ້າຫາກວ່າ ຊະຕາກໍາ ຂອງຫມູ່ເກາະດອນ ຖືກຕົກແຕ່ງແປງໂສມ ດ້ວຍການເລືອກຕັ້ງປີ 1900 ຢ່າງໃດ, ເອກະລາດ ຂອງ ຟີລິບປິນ ກໍຖືກເຍື້ອນເວລາໄປ ດ້ວຍໄຊຊະນະຂອງຝ່າຍຣີປັບລິກັນຢ່າງນັ້ນຄືກັນ. ຄະນະລັດຖະບານ ວາເຣນ ຊີ ຮາຣດິງ ບໍ່ພໍໃຈນໍາຄຸນນະພາບອັນຕໍ່າຕ້ອຍ ຂອງຍຸກສະໄຫມ ຮາຣິສັນ ແລະວິກິດການ ເສດຖະກິດເປັນຊຸດໆ, ຈຶ່ງໄດ້ຈັດສົ່ງ ເລໂອນາຣ໌ ວູດ ກັບ ວິນລຽມ ຊີ ໄປສືບຄວາມ. ການສໍາຫລວດ ຂອງພວກເຂົາ ສະຫລຸບວ່າ "ອາດຈະເປັນຍ້ອນການທໍລະຍົດຂອງຊາວຟີລິບປິນແດ... ແລະແມ່ນຄວາມ ບໍ່ເອົາຫົວໃສ່ໃຈຊາ ຢ່າງຕໍ່າຕ້ອຍທີ່ສຸດ" ຂອງຊາດທີ່ຈະຖອນຕົວອອກ "ໂດຍບໍ່ໃຫ້ໂອກາດອັນດີ ເລີດຄັ້ງ ນຶ່ງ ແກ່ຊາວຟີລິບປິນໃນການມີລັດຖະບານທີ່ຫມັ້ນຄົງ ເປັນລະບຽບຮຽບຮ້ອຍ ແລະຖາວອນ ຊຸດນຶ່ງ". ເມື່ອແນະນໍາໄປວ່າ ຫ້ອງການຂອງຂ້າຫລວງໃຫຍ່ນັ້ນ ຕ້ອງໄດ້ຮັບການປັບປຸງໃຫ້ດີກ່ອນ ຄະນະສໍາຫລວດ ທີ່ປະກອບດ້ວຍ ວູດ ຟອບ ກໍໄດ້ເຍື້ອນການປະກາດເອກະລາດ ທີ່ເບິ່ງຄືວ່າຢູ່ມໍ່ໆນັ້ນ ອອກໄປອີກ.

ການທີ່ ຮາຣ໌ດິງ ແຕ່ງຕັ້ງ ວູດ ເປັນຂ້າຫລວງໃຫຍ່ນັ້ນ ສະແດງວ່າມີການປະຈັນຫນ້າ ລະ ຫວ່າງຜູ້ນໍາ ຟີລິບປິນ ແລະຝ່າຍບໍລິຫານຂອງອາເມລິກາ. ຍ້ອນເປັນຜູ້ກໍາອໍານາດຜະເດັດການ, ວູດ ປະຕິບັດຕົນເປັນດັ່ງໂພງກິນເຫລັກ ທີ່ດຶງດູດຄວາມເປັນປໍລະປັກຂອງ ຟີລິບປິນ. ເຄວຊອນ ແນມເຫັນໂອ ກາດສ່ວນຕົວອັນຍິ່ງໃຫຍ່ ຢູ່ໃນສະພາວະການນັ້ນ ໄດ້ຫມຸນໃຊ້ຄວາມຂາດຊື່ສຽງຂອງວູດ ເພື່ອແຕ່ງຕັ້ງ ຕົນເອງ ຂຶ້ນເປັນຊັ້ນນໍາສໍາຄັນທີ່ສຸດຄົນນຶ່ງ ຂອງຊາວຟີລິບປິນ. ດ້ວຍການໂຈມຕີທາງອ້ອມຜະເດັດການ ແລະນິຍົມອັດຕາທິປະໄຕ ຂອງ ໂອສເມຍາ, ເຄວຊອນ ໄດ້ແຍກພັກຊາດນິຍົມ ອອກເປັນສອງຝ່າຍ. ຈາກ ນັ້ນ ເຂົາຈຶ່ງທະວີຄວາມເຄັ່ງຕຶງໃສ່ ກັບ ວູດ ແລະຮຽກຮ້ອງຂໍໃຫ້ປະເທດຊາດ ສ້າງຕັ້ງແນວໂຮມຂຶ້ນ. ໂອສເມຍາ ຖືກດາງແຫຂອງຄໍາຮຽກຮ້ອງຂອງ ເຄວຊອນ ເພື່ອລັດທິຊາດນິຍົມອັນສູງສົ່ງເລີດລ້ໍາ ພົບ ວ່າຕົນເອງຕ້ອງຈໍາຍອມຮັບຕໍາແຫນ່ງຫມາຍເລກສອງ ຢູ່ໃນພັກຊາດນິຍົມຈັດປະຕິຮູບໃຫມ່. ເມື່ອແຕ່ງ ຕັ້ງຕໍາແຫນ່ງໃຫ້ຕົນເອງແລ້ວ ເຄວຊອນ ຈຶ່ງໄດ້ລົບຝ່າຍຄ້ານອອກ ໂດຍຕັ້ງລັດຖະບານປະສົມຫລາຍໆ ຝ່າຍ ມີພວກຊາດນິຍົມຈັດເປັນຈໍານວນຫລາຍ. ອາໄສອຸບັດເຫດຫລາຍອັນຫລາຍແນວ ໃນນັ້ນໂຮມທັງ ກໍລະນີກົດຫມາຍ ແພຣ໌ ພິລ ບິລ ນໍາ ກໍລະນີຂອງ ຄອບເລຍ, ການຍຸບສະພາສູງ ໂດຍ ວູດ ແລະ ກໍລະນີ ກົດຫມາຍ ແປລບິຊິສ ບິລແດ, ເຄວຊອນ ໄດ້ມ້າງມຸ່ນພະລັງວັງຊາ ຂອງພວກຊາດນິຍົມ ຈັດລົງດ້ວຍ ການເຮັດໃຫ້ວູດ ກາຍເປັນດາບປາຍປູ້ຂອງການເປັນຜູ້ນໍາ. ຈົນມາຮອດເວລາ ວູດ ເສຽຊີວິດ ໃນປີ 1927 ເຄວຊອນ ກໍສາຍເງົາຕົນເອງອອກ ເປັນຮູບຮ່າງຂອງຊາດຟີລິບປິນ.

ເຄວຊອນ ແລະພວກຊາດນິຍົມຈັດ ຄອບງໍາ ລັດທິຊາດນິຍົມຟີລິບປິນ ມາຈົນຮອດສະໄຫມ ສົງຄາມໂລກຄັ້ງທີສອງ. ນັກວິຈານຝ່າຍກົງກັນຂ້າມ ຄືດັ່ງ ຊູມູລອງ ຖືກສົ່ງໄປຮັບຫນ້າທີ່ຢູ່ ເຂດ ຮອບນອກ. ການທ້າທ້າຍອັນສໍາຄັນຕໍ່ຕໍາແຫນ່ງຂອງ ເຄວຊອນ ເກີດຂຶ້ນ ລະຫວ່າງປີ 1930-33 ເມື່ອ ປັດໃຈທັງຫລາຍໂຮມຮ້ອຍເຂົ້າກັນ ໃນນັ້ນ ນັບທັງໄຊຊະນະຂອງຂອງພັກປະຊາທິປະໄຕ ໃນສະພາ

ຄອງແກຣສ ອາເມລິກາ ແລະຂອງ ແຟຣງຄລິນ ໂຣສເວລ ນຳ, ການຟຸ່ງພົ້ນຂຶ້ນ ຂອງກອງທັບຍີ່ປຸ່ນ (ລັດທິທະຫານນິຍົມ), ການເຕີບໃຫຍ່ຂອງກະແສຄັດຄ້ານ ການຍຶດຄອງພິລິບປິນ ໃນກຸ່ມຜູ້ອອກແຮງງານ ກັບ ຊາວນາອາເມລິກາ ແລະຄວາມເປັນປໍລະປັກດ້ານເຊື້ອຊາດ ຕໍ່ຊາວອົບພະຍົບຟິລິບປິນ ທັງຫມົດນີ້ ບວກເຂົ້າກັນ ເຮັດໃຫ້ສະພາຄອງເກຣສ ອາເມລິກາ ຕ້ອງຍອມຮັບຮູ້ ເລື່ອງການໄຝ່ຫາເອກະລາດ ຂອງ ຟິລິບປິນ ອີກ. ກົດຫມາຍສະບັບ ທີ່ສະຫນັບສະຫນຸນເອກະລາດ ສິບປີ ສະຫະລາຊະອານາຈັກ ສິບປີ ຖືກຮັບຮອງ ໂດຍສະພາຄອງເກຣສ ອາເມລິກາ ຫລັງຈາກ ໂອສເມຍາ ແລະມານູເອລ ໂຣ ຊັສ ຍົນຂວາຍໄດ້ສຽງ ຢູ່ໃນວໍຊິງຕັນ. ກົດຫມາຍສະບັບ ນັ້ນ ຖືກຍັບຍັ້ງໂດຍ ປະທານາທິບໍດີ ເຮີເບີຕ ຮູເວີຣ ແຕ່ແລ້ວ ກໍຜ່ານໄປໄດ້ ແຕ່ຊ້ຳໄປຖືກ ຂັດຂວາງອີກຢູ່ ຟິລິບປິນ ໂດຍ ເຄວຊຸອນ ຜູ້ທີ່ຢ້ານວ່າໂອສເມຍາ ອາດຈະໄດ້ກັບມາມີຕຳແຫນ່ງເດີມຂອງເຂົາອີກ ໃນຖານະສະຖາປະນິກ ແຫ່ງຄວາມເປັນເອກະລາດ. ໃນ ລະຫວ່າງການສູ້ຍັນຄັດຄ້ານເອກະລາດແບບເອົາເປັນເອົາຕາຍກັນຢູ່ໃນຟິລິບປິນນັ້ນ ພັກຊາດນິຍົມຈັດ ໄດ້ແຕກແຍກກັນອີກຄັ້ງນຶ່ງ, ເຄວຊຸອນ ຜູ້ເປັນນັກການເມືອງຕົວ ເອກໄດ້ຫມຸນໃຊ້ ຄວາມເປັນຜູ້ມີບຸນຄຸນ ຂອງຕົນງັດງ້າງ ເພື່ອສະກັດກັ້ນຮ່າງກົດຫມາຍ ແລະໄດ້ເຈລະຈາ (ເພາະເຂົາຮູ້ດີວ່າ ເຂົາສາມາດເຮັດ ໄດ້) ໃຫ້ໄດ້ຮ່າງກົດຫມາຍທີ່ເອື້ອອຳນວຍກວ່ານີ້ ຈາກປະທານາທິບໍດີ ຜູ້ຫາກໍໄດ້ ຮັບເລືອກຕັ້ງມາໃຫມ່ໆ. ມາດຕະການນີ້ ເປັນທີ່ຮູ້ຈັກກັນໃນນາມວ່າ ກົດໝາຍໄທດິງ ມັກ ດູຟີ. ໂອສເມນາ ຜູ້ເຊິ່ງ ຊູມູລອງ ບໍ່ມັກ ປານໃດ ຈຶ່ງຕັດສິນໃຈອີກຄັ້ງນຶ່ງ ບໍ່ແຕ່ງຕັ້ງຕົນເອງໃນຖານະເປັນຜູ້ນຳຝ່າຍຄ້ານ ແລະດຳເນີນການ ຫາສຽງສະຫມັກ ເປັນຮອງປະທານິທິບໍດີ ສຳລັບການເລືອກຕັ້ງລັດຖະບານ ສະຫະລາຊະອານາຈັກ ເທື່ອໃຫມ່.

ສະຫລຸບແລ້ວ ໃນລະຍະເວລາ 40 ປີ ນັບແຕ່ 1901 ຫາ1940 ມີເຫດການກົງກັນຂ້າມຢ່າງຂາດຂັ້ນ ກັບເຫດການທີ່ເກີດຂຶ້ນ ໃນທົດສະວັດປາຍໆ ຂອງສະຕະວັດທີ 19. ສ່ວນວ່າ ລະຍະກ່ອນຫນ້ານີ້ ໂຄງ ສ້າງທາງການເມືອງຂອງສັງຄົມ ກຳລັງຜ່ານການຈັດລະບົບໃຫມ່ຢ່າງເລິກເຊິ່ງ ຕໍ່ມາ ກໍຢູ່ໄດ້ຢ່າງທຸ່ນ ທ່ຽງຫມັ້ນຄົງພໍສົມຄວນ. ອີກດ້ານນຶ່ງ ສະຕະວັດ ທີ 20 ກໍແມ່ນລະຍະ ທີ່ເຫັນວ່າມີປະຊາກອນຫລາຍ ຂຶ້ນຢ່າງເຫັນໄດ້ຄັກ ຢູ່ໃນການສ້າງຕົວເມືອງ, ໃນວຽກງານການສຶກສາ, ໃນການອອກສຽງເລືອກຕັ້ງ ແລະໃນການຫັນປ່ຽນເປັນທັນສະໄຫມ. ໃນທ້າຍສະຕະວັດທີສິບເກົ້າ ພວກປັນຍາຊົນທ້ອງຖິ່ນ ເປັນປະຊາ ກອນ ຈຳນວນຫນ້ອຍດຽວຂອງຊາດ ມາຮອດປີ 1941 ຈຳນວນແທ້ໆ ແລະອັດຕາສ່ວນ ຂອງຜູ້ໄດ້ຮັບ ການສຶກສາ ໄດ້ທະວີຂຶ້ນຢ່າງຫນ້າຕົກໃຈ. ຄວາມແຕກຕ່າງທາງດ້ານພູມສາດ ພາສາສາດ ແລະດ້ານ ເຊື້ອຊາດຊົນເຜົ່າ ຄືນມາມີຄວາມສຳຄັນຫນ້ອຍລົງ ຍ້ອນວ່າ ຮູບແບບວັດທະນະທຳທ້ອງຖິ່ນ ຖືກປ່ຽນ ແທນ ເປັນວັດທະນະທຳແຫ່ງຊາດ. ປະຊາຊົນທຸກຊົນຊັ້ນເສດຖະກິດ ແລະສັງຄົມ ອອກມາສະແດງຕົວ ເປັນອັນ ນຶ່ງອັນດຽວກັນກັບລັດທິຊາດນິຍົມ ຟິລິບປິນ ເຊັ່ນ ທຸງຊາດ ເພງຊາດ ແລະສິນລະປະ. ດັ່ງນັ້ນ ຂະນະທີ່ຄວາມເລື່ອມລ້ຳ ລະຫວ່າງຜູ້ເຊົ່າດິນນາ ກັບເຈົ້າຂອງດິນນາ, ຄົນໃນເມືອງ ກັບຄົນບ້ານນອກ ຄົນຮັ່ງ ກັບຄົນທຸກ ຈຶ່ງມີແຕ່ນັບມື້ນັບຫລາຍຂຶ້ນ ແທນທີ່ຈະຫລຸດລົງ. ທຸກຊັ້ນຄົນມີຖານະດຽວກັນຢູ່ໃນ ສະຫະລາຊະອານາຈັກ. ລັດທິຊາດນິຍົມ ສາມາດອຸ້ມຊູສະຫນອງຄວາມເປັນປຶກແຜ່ນ ເຖິງແມ່ນວ່າ ບໍ່ອາດຕອບບັນຫາສຳຄັນໆ ຫລາຍຂໍ້ໄດ້ ກ່ຽວກັບທິດທາງ ແລະເອກະລັກ. ຄວາມສຳເລັດຂອງລັດທິຊາດ ນິຍົມຟິລິບປິນ ເຮັດໃຫ້ຄົນຟິລິບປິນ ຜູ້ນຶ່ງ ຂຽນໄວ້ວ່າ ພວກເຂົາເປັນ "ຄົນຕາເວັນອອກ ຢືນຢູ່ກາງປາກ ປະຕູເຂົ້າແຫ່ງອາຊີ, ສະຫນັບສະຫນຸນຢ່າງເລິກເຊິ່ງ ປະເທດບ້ານໃກ້ເຮືອນຄຽງ ທີ່ເປັນຍາດພີ່ນ້ອງກັນ ທີ່ເດີນອອກໄປຄວາຫາວັດທະນະທຳ ສະເປນ ແລະອາເມລິກາ. " ໃນລະຍະເວລາກ່ອນເກີດສົງຄາມ ຊາວ ຟິລິບປິນ ມີຄວາມທະນົງໃຈຫລາຍ ທີ່ຊາດຂອງພວກເຂົາ ສາມາດສະຫນອງຕົວຢ່າງ ສຳລັບປະເທດ ອາຊີຕາເວັນອອກສຽງໃຕ້ ເພື່ອໃຫ້ເຮັດນຳແບບ. ການເບິ່ງໂລກໃນແງ່ດີໃນລະຍະເວລານັ້ນ ຊ່ອຍໃຫ້ ບັນຫາກ່ຽວກັບເອກະລາດ ມີຄວາມຢ່ອນຍານລົງແດ່.

# ບົດທີ 26 ປະເທດພະມ້າ

ລະຍະເວລາເກືອບຫົກສິບກວ່າປີ ທີ່ອັງກິດປົກຄອງພະມ້າທັງຫມົດ ໂຮມທັງການສະຖາປະນາການປົກຄອງຂອງອັງກິດລະຍະຕົ້ນໆ ໃນຂົງເຂດເບື້ອງຊາຍແດນພາກໃຕ້ຂອງປະເທດນັ້ນ ໄດ້ມີຜົນກະທົບຢ່າງເລິກເຊິ່ງບໍ່ແມ່ນຫນ້ອຍ ຕໍ່ເສດຖະກິດ ແລະສັງຄົມ ຕໍ່ຄວາມສຳພັນຂອງຊາວນາ ຜູ້ເປັນປະຊາຊົນສ່ວນຫລວງຫລາຍ ແລະຕໍ່ກັບລັດ. ຜົນສະທ້ອນຂອງການປະຕິວັດ ໂດຍການຜູກຕິດເສດຖະກິດຂອງພະມ້າ ເຂົ້າກັບໂລກ ແລະໃນທາງການເມືອງ ຜູກເຂົ້າກັບອິນເດັຽນັ້ນ ເປັນທີ່ຍອມຮັບກັນແຕ່ດ້ານ ເລັກນ້ອຍໃນປີ 1886 ແຕ່ພໍມາຮອດທົດສະວັດທີສີ່ ຂອງສະຕະວັດນັ້ນ ຜົນຮັບກໍແມ່ນຄວາມຕ້ອງການອັນບໍ່ສາມາຕ້ານ ທານໄດ້ ໃນເລື່ອງການຮຽກຮ້ອງເອົາເອກະລາດຂອງ ປະເທດ.

ກຸ່ມນຳພາຊຸດ ກ່ໍຕັ້ງຂອງສັງຄົມເກົ່າເຊັ່ນ ພວກຂ້າລາຊະການປະຈຳລາຊະສຳນັກ ພວກເຈົ້າແຂວງ ແລະພະສົງອົງຄະເຈົ້າ ໄດ້ຈັດຕັ້ງການຕ້ານທານອັນເຂັ້ມແຂງ ຄັດຄ້ານການປົກຄອງ ທີ່ອັງກິດຍັດຍູ່ໃຫ້ເມື່ອທ້າຍສະຕະວັດທີ19. ປະຊາຊົນທັງບຸກຄົນ ແລະເປັນກຸ່ມເປັນຈຸໄດ້ເຂົ້າຮ່ວມມາກມາຍ ຍ້ອນໄດ້ຮັບຜົນປະໂຫຍດຈາກກົດລະບຽບໃຫມ່ ຈຶ່ງສວຍໂອກາດເພີ່ມຕື່ມ ຖ້ວມກາງຄວາມ ສັບສົນວຸ້ນວາຍ ແຫ່ງການປ່ຽນແປງອັນເລິກເຊິ່ງທາງດ້ານການເມືອງ. ການຂາດອຳນາດບໍລິຫານສູນກາງ ແລະການຄວບຄຸມທາງການເມືອງ ຢູ່ໃນທົ່ວທຸກເຂດຂອງພະລາຊະອານາຈັກ ອຳນວຍໃຫ້ພວກຜູ້ນຳລະດັບຂົງເຂດຊ່ວງເສັງກັບເມືອງຫລວງ ໃນການຊົມໃຊ້ຊັບພະຍາກອນທ້ອງຖິ່ນ ແລະຄວາມເຄັ່ງຕຶງດ້ານການປົກຄອງ ກໍຮຸນແຮງຍິ່ງຂຶ້ນ ໃນຊຸມປີຕໍ່ໆມາ ລຸນຫລັງການໂຮບເອົາດິນແດນພະມ້າ ໄປຂຶ້ນກັບອິນເດັຽ ຄັ້ງສຸດທ້າຍ. ຄວາມມຸ່ງມາດໃນການປົກຄອງຕົນເອງຂອງເຈົ້າປົກຄອງບາງຄົນໃນ ລັດສານ ເຊົ່າວະບາວ (Shan states, the sawbwa) ໄດ້ສະທ້ອນເລື່ອງນີ້ອອກຢ່າງຈະແຈ້ງ. ຂົງເຂດເຫລົ່ານີ້ ປົກຄອງໂດຍອັງກິດຢູ່ແລ້ວ ການປ່ຽນແທນຕຳແຫນ່ງພໍ່ບ້ານທີ່ສືບທອດກັນມາ ໂດຍແຕ່ງຕັ້ງພະນັກງານຕາມລະບົບລາຊະການຢ່າງປາສະຈາກອຳນາດຕາມປະເພນີນັ້ນໄດ້ເລີ່ມເຈາະເຊາະຄວາມສາມັກຄີພາຍໃນບ້ານແລ້ວ. ພະສົງ ເຊິ່ງເປັນຜູ້ນຳພາຂອງສັງຄົມເກົ່າ ໄດ້ພາກັນລຸກຂຶ້ນ ມາສະແດງບົດບາດທາງການເມືອງຢູ່ໃນຊຸມຊົນຂອງຕົນ ໂດຍຮູ້ສຶກຂຶ້ນອົກຂຶ້ນໃຈ ຍ້ອນເຫັນອັງກິດ ໄຮ້ຄວາມສາມາດ ໃນການຮັກສາອຳນາດຂອງສະຖາບັນສົງສູນກາງ.

ການທ່ຽວສຳມະເລຜົນພະເນຈອນ ແລະການປຸ້ນສະດົມເຊິ່ງກະທຳຂຶ້ນເພື່ອເປີດໂອກາດ ໃຫ້ບຸກຄົນ ແລະກຸ່ມຄົນຈຳພວກນຶ່ງ ຫລົບຫລີກຈາກການຄວບຄຸມຂອງທາງການ ໄດ້ຮັບການຈັດຕັ້ງຂຶ້ນຕາມຮູບແບບທາງການເມືອງຂອງພະມ້າແບບເກົ່ານັ້ນ ເກີດຂຶ້ນເພື່ອຕ່ໍຕ້ານການຂົ່ມເຫງບີບບີ້ ຂອງຂ້າຣາຊະການ ຫລື ເພື່ອຕ່ໍຕ້ານການໄຮ້ອຳນາດອັນແຈ່ມແຈ້ງ. ມັນເປັນທຳມະຊາດຢ່າງນຶ່ງທີ່ການສະແດງອອກດ້ວຍການປະທ້ວງເຊັ່ນນັ້ນ ຈຳຕ້ອງສືບຕ່ໍດຳເນີນໄປພາຍໃຕ້ການປົກຄອງຂອງອັງກິດ ໂດຍສະເພາະໃນພາກໃຕ້ຂອງພະມ້າ ມີບ້ານໃຫມ່ໆຫລາຍບ້ານຕັ້ງຂຶ້ນໂດຍຊາວອົບພະຍົບຈາກພາກເໜືອ, ແລະໃນບ່ອນທີ່ການນຳພາຊັກຊ້າ ໃນການຂະຫຍາຍໂຕຢູ່ພາຍໃນ, ເຂດເຫລົ່ານີ້ ຖືກເສກສັນປັ້ນແຕ່ງເອົາ ໂດຍຄຳສັ່ງຂອງຝ່າຍປົກຄອງອັງກິດ ແຕ່ບັດນີ້ ການເຮັດດັ່ງນັ້ນມີຄວາມຫມາຍໄປອີກທາງນຶ່ງ ຍ້ອນວ່າລັດອັງກິດ ຫ່ວງໃຍໃນເລື່ອງການຄວບຄຸມກຳລັງຄົນ ຫນ້ອຍກວ່າທີ່ເຄີຍມີ ຕ່ໍການຄວບຄຸມທີ່ດິນກັບເງິນຕາ ດ້ວຍວ່າ ລາຍໄດ້ຈາກການຂະຫຍາຍເນື້ອທີ່ກະສິກຳ ແລະການທະວີຜາສີອາກອນໄດ້ເຂົ້າມາມີບົດບາດແທນບ່ອນການປະຕິບັດຫນ້າທີ່ທາງສາດສະຫນາ ແລະພິທີກຳຂອງລັດຖະລາຊາໄປ.

ການຕ່ໍຕ້ານອັງກິດອີກແບບອື່ນໃນທ້າຍສະຕະວັດທີ 19 ມາຈາກພວກຫົວຫນ້າກຸ່ມຊົນຊາດຊົນເຜົ່າຕ່າງພາສາ ເຊັ່ນ ພວກລັດສານ ກະຊິນ, ຊິນ, ວ້າ (Shans, Kachins, Chins, Wa) ແລະກຸ່ມຢູ່ນອກອື່ນໆອີກ ເຊິ່ງໄດ້ພະຍາຍາມຮັກສາລະດັບການປົກຄອງດ້ວຍຕົນເອງໄວ້ ດ້ວຍຄວາມຫຍຸ້ງຍາກ ພໍສົມຄວນຢູ່ພາຍໃຕ້ຂອບເຂດການເປັນເມືອງສ່ວຍຕາມປະເພນີ. ຂະນະທີ່ພະເຈົ້າມິນດົງ ກັບ ພຣະເຈົ້າທິບໍ ພະຍາ

ຍາມປັບປຸງການຄວບຄຸມຂອງພະອົງ ໃຫ້ຢູ່ເໜືອພວກເຈົ້າປົກຄອງເຂດຮອບນອກນັ້ນ ພວກເພິ່ນຊ້ຳໄດ້ກໍ່ໃຫ້ເກີດ ການຂັດຂືນຕໍ່ສູນກາງ ເຊິ່ງມີອາຍຸຍືນຍາວມາກວ່າລາຊະວົງກອນບອງ (Konbong dynasty). ເຈົ້າປົກຄອງລັດສານຜູ້ສຳຄັນບາງອົງເຊັ່ນ ລັດສານ ຊາວບວາ ເຫັນວ່າການຫລົ້ມຈົມ ຂອງສະຖາບັນລາຊະວົງມັນດາເລຍ ເປັນໂອກາດນຶ່ງສຳລັບຍາດແຍ່ງເອົາອຳນາດທີ່ສູນເສຽໃຫ້ແກ່ລາຊະສຳນັກນັ້ນ ຄືນມາ, ດັ່ງນັ້ນ ພວກອັງກິດ ຈຶ່ງຈຳຕ້ອງບີບບັງຄັບໃຫ້ພວກເຂົາຮັບເອົາການຄວບຄຸມຂອງສູນກາງ ໂດຍການໃຊ້ວິທີການທາງທະຫານ ເມື່ອພິສູດແລ້ວວ່າ ວິຖີການທາງການທູດ ໃຊ້ບໍ່ເປັນຜົນສຳເລັດ.

ສະມາຊິກຂອງກຸ່ມເຫລົ່ານີ້ທັງຫມົດ ຄື ນາຍບ້ານ ພຣະສົງ, ຂີ້ລັກນາຍໂຈນ ກັບພວກຫົວໜ້າຊົນຊາດຊົນເຜົ່າເຂດນອກໆ ໄດ້ພາກັນຕໍ່ຕ້ານຂັດຂືນຢ່າງຈິງຈັງ ຕໍ່ການເຂົ້າມາວາງອຳນາດຄວບຄຸມ ຂອງອັງກິດໃນທົ່ວປະເທດພະມ້າ. ການຕໍ່ຕ້ານແລະການກໍ່ຂະບົດທີ່ລະບາດໄປທົ່ວປະເທດ ລະຫວ່າງປີ 1886 ຫາ 1890 ແລະຍັງດຳເນີນຕໍ່ມາຢູ່ໃນເຂດຫ່າງໄກສອກຫລີກຈົນຮອດປີ1895 ນັ້ນ ແນ່ນອນວ່າ ໃນທາງການເມືອງແລ້ວ ແມ່ນຢູ່ໃນພາວະຟົດຮ້ອນຮຸນແຮງຢ່າງບໍ່ຕ້ອງສົງໄສ. ຢ່າງໃດກໍຕາມ ເຖິງວ່າຜູ້ເຂົ້າຮ່ວມຈະແມ່ນ "ນັກຊາດນິຍົມ"ຫລືບໍ່ ກໍຍັງເປັນອີກບັນຫານຶ່ງ. ຈະເປັນຄວາມຜິດພາດອັນນຶ່ງ ຫາກຕັດພວກເຂົາອອກໄປ ຄືດັ່ງທີ່ພວກອັງກິດມັກເຮັດເລື້ອຍໆ ຄືໄປຖືວ່າພວກເຂົາເປັນພຽງນັກສວຍໂອກາດຜູ້ກຽດຊັງຄົນຕ່າງຊາດ, ນັກເພ້ີຝັນ ຫລື ນັກສວຍໂອກາດຂາດຄວາມຢຳເຢງກົດຫມາຍ, ແນ່ນອນວ່າໃນນັ້ນ ກໍມີຈຳນວນນຶ່ງ ປົນເປຢູ່ຢ່າງບໍ່ຕ້ອງສົງໄສ ເຊັ່ນພວກທີ່ເຄີຍມີອຳນາດວາດສະຫນາສະໄຫມຢູ່ກັບເຈົ້າຊີວິດນັ້ນ ເປັນທຳມະດາ ວາ ພວກເຂົາຕ້ອງຢາກປົກປ້ອງສິດພິເສດຂອງຕົນ ເຊິ່ງຂັດກັບຄວາມຮຽກຮ້ອງຕ້ອງການຂອງລະບຽບ ຫລັກການໃຫມ່ ແລະເຊັ່ນດຽວກັນ ກໍປ້ອງກັນຄຸນຄ່າຂອງປະເພນີ ທີ່ພວກເຂົາເຊ້ືາໃຈດີ ແລະຫວງແຫນໄວ້. ແຕ່ຫາກວ່າພວກເຂົາບໍ່ສາມາດເຕ້ົາໂຮມສະສົມກຳລັງເປັນອັນນຶ່ງອັນດຽວກັນໄດ້ ໂດຍບໍ່ມີຈຸດສຸມຮວມອັນດຽວກັນ ຄືຄວາມຈົງຮັກພັກດີ ເຊິ່ງໃນອະດີດ ມີແຕ່ສະຖາບັນກະສັດຢ່າງດຽວ ເຄີຍໃຫ້ໄດ້ ເພ່ືອມາຕ້ານຢັນກັບກອງທັບອິນເດຽອັງກິດ ທີ່ເຕັມໄປດ້ວຍລະບຽບວິໄນ ພ້ອມດ້ວຍກຳລັງອາວຸດຄົບຖ້ວນ ແລະພະລັງຈັດຕັ້ງ ຢ່າງດີ ທັງເປັນກ້ອນກຸ່ມຂອງລະບົບລາຊະການໃຫມ່.

ການປ່ຽນແປງທັງຫລາຍ ທີ່ເກີດຈາກການບັງຄັບໃຊ້ລະບົບປົກຄອງແບບອານານິຄົມ ຢູ່ປະເທດພະມ້າ ໄດ້ພາໄປເຖິງການກໍ່ເກີດສັງຄົມແບບໃຫມ່ ເຊິ່ງແຕກຕ່າງກັນຫລາຍກັບສັງຄົມທີ່ເຄີຍມີມາ ແຕ່ກ່ອນ ພາຍໃຕ້ໂຄງສ້າງຕາມປະເພນີ ທີ່ສະຫນັບສະຫນຸນກະສັດ. ແທນທີ່ຈະພະຍາຍາມຄວບຄຸມ ແລະດູແລຄວາມມັກໃຫຍ່ຂອງບຸກຄົນ ແລະການຊຸກຍູ້ທາງເສດຖະກິດ ດັ່ງທີ່ພວກເຈົ້າຊີວິດເຄີຍເຮັດ, ພວກປົກຄອງອານານິຄົມ ຊ້ຳພາກັນຊອກແຕ່ສິ່ງເສີມລັດທິນິຍົມບຸກຄົນ ແລະສ້າງເງ່ືອນໄຂທີ່ອາດຈະອຳນວຍໃຫ້ແກ່ການແຜ່ຂະຫຍາຍທາງດ້ານເສດຖະກິດ, ການຄ້າຂາຍແລະຜົນກຳໄລເຂ້ົາມາແທນບ່ອນກົດຫມາຍ ອັນຫລົ້ມແຫລວໂຍະຍານ ຂອງເຈົ້າຊີວິດ ແລະການສຶກສາອັນມີປະໂຫຍດ ສຳລັບໃຫ້ໄດ້ເປັນທະນາຍຄວາມ ຫລື ພະນັກງານທ້ອງການກໍໄດ້ເຂ້ົາມາແທນບ່ອນການຮ່ຳຮຽນທາງສາດສະຫນາຢູ່ວັດປະຈຳບ້ານໄປ.

ການສຶກສາ ແມ່ນສ່ວນປະກອບພາກນຶ່ງ ຂອງອຳນາດການປົກຄອງອານານິຄົມພະມ້າ. ການສຶກສາ ຖືກກຳນົດໃຫ້ຕອບສະຫນອງການບໍລິການດ້ານພົນລະເຮືອນແລະວິສາຫະກິດທາງເສດຖະກິດ ແບບສະໄຫມໃຫມ່ ດ້ວຍການມີພະນັກງານປາກເວ້ົາພາສາອັງກິດ ແລະຂ້າລາຊະການອ່ືນໆ ແລະຕອບສະຫນອງໃຫ້ລັດ ໃນເລ່ືອງສ້າງຄວາມສາມາດ ແບບທີ່ລັດທັນສະໄຫມລັດນຶ່ງໆຕ້ອງການ. ບັນດາ ຕົວເມືອງ ແລະຫົວເມືອງຂອງພະມ້າອັງກິດ ກາຍເປັນໃຈກາງແຫ່ງການຮ່ຳຮຽນ, ເປັນບ່ອນຢູ່ບ່ອນນອນ ແລະຮ້ານຄ້າຂາຍ, ແລະເປັນບ່ອນບັນຈຸໄວ້ເຊ່ືງຄຸນຄ່າທີ່ສ່ືສານແລກປ່ຽນກັນຢູ່ໃນໂຮງຮຽນ. ການຊັບຊ້ອນພະນັກງານເຂ້ົາເຮັດວຽກໃນລັດຖະບານ ຕົ້ນຕໍແລ້ວແມ່ນເອົາຄົນໃນເມືອງ(ໂດຍສະເພາະແມ່ນທາງເຂດໃຕ້ ຂອງພະມ້າ)ຫລາຍກວ່າຄົນມາຈາກບ້ານນອກຫ່າງໄກ ຫລື ມາຈາກພາກເໜືອ, ການຍຶດຄອງເອົາພະມ້າເປັນອານານິຄົມ ເທ່ືອລະກ້າວ ຕ້ັງແຕ່ຊາຍຝ່ັງທະເລເຂ້ົາສູ່ໃຈກາງແຜ່ນດິນ ກ້າວໜ້າໄປເລ້ືອຍໆ ຄາວທີ່ສົງຄາມໂລກຄ້ັງທີນຶ່ງລະເບີດຂ້ຶນ. ພວກອັງກິດ ໄດ້ຝຶກອົບຮົມຂ້າລາຊະການ ເຊ່ືງບໍ່ໄດ້ສືບທອດເຊ້ືອ

ສາຍມາ ແລະທັງບໍ່ໄດ້ມາຈາກຊົນຊັ້ນນຳອ້າລາຊະການຜູ້ເກົ່າ, ການພັດທະນາທາງສັງຄົມພາຍໃຕ້ ການປົກຄອງຂອງອັງກິດ ໄດ້ຮັບການກໍ່ສ້າງຂຶ້ນດ້ວຍຮູບແບບໃຫມ່ ທີ່ກໍ່ຕັ້ງຂຶ້ນຢູ່ໃນພະມ້າພາກໃຕ້ ກ່ອນທີ່ ມັນດາເລ ຈະຫລົ້ມຈົມ. ຄອບຄົວທີ່ບໍ່ເປັນອ້າລາຊະການ ທີ່ຍັງເຫລືອລອດຢູ່ ຫລື ທີ່ອົບພະຍົບ ໄປຢູ່ພາກໃຕ້ຂອງ ພະມ້າກ່ອນປີ 1885 ແລະໄດ້ຊອກບຸກເບີກດິນໃຫມ່ຫລື ຜູ້ທີ່ເຂົ້າໄປເຮັດທຸລະກິດຢູ່ໃນເມືອງ ຫລື ຜູ້ເຂົ້າໄປ ເຮັດວຽກບໍລິການນຳພວກອັງກິດ, ຄົນພວກນີ້ ເກືອບຢ່າງກວ່າ ໄດ້ສົ່ງລູກຊາຍໄປຮຽນ ຢູ່ໂຮງ ຮຽນອັງກິດຫມົດ. ຄົນຫນຸ່ມສາວເຫລົ່ານີ້ ເຕີບໃຫຍ່ພາຍໃຕ້ການປົກຄອງຂອງອັງກິດ ກໍມີຄວາມສຳພັນກັບ ຜົນປະໂຫຍດທາງເສດຖະກິດ ແລ້ວກໍໄດ້ຮັບຖານະຕຳແຫນ່ງທາງລາຊະການ ເພື່ອຢັນຕ້ານກັບຜູ້ມາໃຫມ່ ຈາກພາກເຫນືອ ພາຍຫລັງປີ 1885.

ນັກສຶກສາໃນໂຮງຮຽນທີ່ລັດຖະບານໃຫ້ການຊ່ອຍເຫລືອ ຕ້ອງໄດ້ຮຽນຫລັກສູດທີ່ໃຫ້ຄວາມສຳຄັນ ແກ່ພາສາອັງກິດ, ສິນລະປະ ແລະວິທະຍາສາດຂອງຕາເວັນຕົກ, ໃນຂະນະທີ່ຄວາມຮັບຮູ້ແລະສີມືວິຊາຊີບ ຂອງພວກເຂົາບໍ່ມີຫຍັງຄືກັບຫມູ່ເພື່ອນຮ່ວມບ້ານ ທີ່ເປັນຊາວນາຜູ້ຮັກຊາດນັ້ນເລີຍ. ຢ່າງໃດກໍດີ ພວກຊົນ ຊັ້ນສູງໃນເມືອງຮຸ່ນໃຫມ່ນີ້ ກໍໄດ້ຊອກສະແຫວງຫາເສັ້ນທາງເພື່ອເຊື່ອມຕໍ່ຄວາມແຕກໂຕນລະຫວ່າງຮູບ ແບບການດຳລົງຊີວິດສັງຄົມແບບເກົ່າກັບແບບໃຫມ່ຢູ່ໃນພະມ້າ ແລະໃນຕອນຕົ້ນກໍພົບວິທີການທີ່ຈະເຮັດ ແນວນັ້ນໄດ້ ໂດຍອາໄສຂະບວນການນຶ່ງເພື່ອປະຕິຮູບແລະປັບປຸງຄວາມເຊື່ອຖືແລະການປະພຶດປະຕິບັດ ຕາມແນວທາງສາສະຫນາພຸດໃຫ້ທັນສະໄຫມ ໂດຍການຈັດຕັ້ງວາງຮູບແບບເປັນຕົວຕົນຂຶ້ນ ຢູ່ໃນ ສະມາຄົມຊາຍຫນຸ່ມພຸດ (Young Men's Buddhist Association/ YMBA). ໃນທາງປະຕິບັດ ຊາວພຸດ ທີ່ເປັນຄະຫັດ ເລີ່ມເຂົ້າຮັບບົດບາດດ້ານເຜີຍແຜ່ສິນທຳ ແລະດ້ານການນຳພາ ເຊິ່ງມາຮອດເວລານັ້ນ ແມ່ນພະສົງ ອົງໄດ້ຮັບການສຶກສາມາຕາມປະເພນີ ຄອບຄອງຕຳແຫນ່ງຫນ້າທີ່ນັ້ນຢູ່ເກືອບທັງຫມົດ. ສະມາຄົມຊາຍຫນຸ່ມພຸດ(ส.ช.พ) ຈັດຕັ້ງຂຶ້ນໃນປີ 1906 ໄດ້ເຕົ້າໂຮມເອົາຊາວພຸດທັງຫມົດມາຢູ່ພາຍໃຕ້ຄັນ ທຸງແຫ່ງຊາດອັນດຽວກັນ ໂດຍມີກຸ່ມຊາວພຸດຫົວສະໄຫມໃຫມ່ຫລາຍກຸ່ມທີ່ກໍ່ຕັ້ງຂຶ້ນໃນຕົວເມືອງ ທົ່ວອານາ ນິຄົມຕອນໃກ້ສ້ຽງສຸດສະຕະວັດ ດ້ວຍຄວາມພະຍາຍາມ ເພື່ອຄົ້ງໄວ້ເຊິ່ງເອກະລັກທາງ ວັດທະນະທຳ ທີ່ແຕກຕ່າງກັບວັດທະນະທຳຕາເວັນຕົກຂອງເຈົ້າອານານິຄົມ. ໃນເວລາດຽວກັນ ສະມາຄົມກໍໄດ້ຮັບຮູ້ເຖິງ ຄວາມໄຮ້ສະມັດຖະພາບຂອງວັດທະນະທຳແບບເດີມຂອງພະມ້າ ໃນການສ້າງສາສັງຄົມອິດສະລະ ທີ່ສາ ມາດປັບຕົວໄປຕາມເງື່ອນໄຂໃຫມ່ ເຖິງແມ່ນວ່າ ສະມາຄົມ ບໍ່ໄດ້ຖືກຈັດຕັ້ງຂຶ້ນ ດ້ວຍເຈດຕະນາທາງການ ເມືອງກໍຕາມ ແຕ່ຜົນສະທ້ອນທາງການເມືອງຂອງອົງກອນປະເພດນີ້ ກໍຫາກປາກົດຕົວອອກຢ່າງຈະ ແຈ້ງ, ໃນຂັ້ນຕົ້ນ ພວກອັງກິດໄດ້ເກືອດຫ້າມພະນັກງານຂອງລັດ ເຂົ້າໄປຫຍຸ້ງກ່ຽວກັບສະມາຄົມ, ຢ່າງໃດ ກໍຕາມ ຕໍ່ມາພາຍຫລັງ, ອາດເປັນຍ້ອນການຮັບຮູ້ກິດຈະກຳຂອງສະມາຄົມວ່າ ມີລັກສະນະທາດແທ້ ປະຕິຮູບ, ພວກອັງກິດ ຈຶ່ງໄດ້ຍົກເລີກການເກືອດຫ້າມນັ້ນ ແລະໃນລະຍະສັ້ນໆ ສະມາຄົມກໍຕົກຢູ່ພາຍໃຕ້ການຄວບ ຄຸມຂອງສະມາຊິກຊັ້ນນຳແຫ່ງການຈັດຕັ້ງທ້ອງຖິ່ນ ເຊິ່ງໃນນັ້ນ ພວກເຂົາຫລາຍຄົນມີສາຍສຳພັນໃກ້ຊິດ ກັບລັດຖະບານ.

ສົງຄາມໂລກຄັ້ງທີ 1 ແລະເຫດການອື່ນໆທີ່ກ່ຽວຂ້ອງ ຢູ່ໃນອິນເດຽອັງກິດ ໄດ້ຂະຫຍາຍຂອບຟ້າ ໃຫ້ແກ່ຊົນຊັ້ນນຳໃນເມືອງຢ່າງໄວວາ ແລະນັ້ນໄດ້ນຳໄປເຖິງການແບ່ງແຍກລະຫວ່າງກຸ່ມນັກປະຕິຮູບນິຍົມ ຜູ້ເຂົ້າຂ້າງອັງກິດ ກັບບຸກຄົນເອກະຊົນຜູ້ມີທ່າອຽງນິຍົມການເຄື່ອນໄຫວດ້ານການເມືອງ. ການມີສ່ວນ ຮວມໂດຍກົງໃນສົງຄາມຂອງຊາວພະມ້ານັ້ນ ຫນ້ອຍຫລາຍ ເມື່ອປຽບໃສ່ປະເທດໄທ ແລະຫວຽດນາມ, ມີ ຊາວພະມ້າ ແຕ່ແປດພັນຄົນເທົ່ານັ້ນ ຖືກສົ່ງໄປເປັນແຮງງານໃນອີຣັກ. ການສົ່ງອອກເຂົ້າ ກໍຖືກກະທົບ ກະເທືອນ ດ້ານບຶດນຶ່ງບຶດດຽວເທົ່ານັ້ນ ເພາະຂາດເຂີນເຮືອຂົນສົ່ງ. ເຖິງຢ່າງໃດກໍດີ, ຜົນສະທ້ອນທາງ ອ້ອມ ກໍມີອິດທິພົນຢ່າງແຮງຕໍ່ກຸ່ມຊັ້ນນຳຮຸ່ນໃຫມ່ ແລະໄດ້ເຮັດໃຫ້ພວກເຂົາມີທ່າທີທາງການເມືອງ ເດັດ ດ່ຽວຂຶ້ນ. ສະມາຄົມຊາຍຫນຸ່ມພຸດ (YMBA) ໄດ້ຕັ້ງບັນຫາສຳຄັນກ່ຽວກັບສາດສະຫນາ ແລະ ວັດທະນະ ທຳ ໃນປີ 1916 ເມື່ອທາງສະມາຄົມລຸກຂຶ້ນປະທ້ວງການປະພຶດຕົວຂອງຊາວເອີຣົບ ກັບຜູ້ບໍ່ເປັນພຸດທະສາ

ສະນິກກະຊົນ ທີ່ດີ້ດ້ານໃສ່ເກີບເຂົ້າໄປຊົມວັດວາອາຮາມ ແລະພະທາດເຈດີ, ແນ່ນອນແລ້ວວ່າ ຈຸດສຳຄັນ ໄດ້ໄປກະທົບໃສ່ຫມາກຫົວໃຈ ແຫ່ງສາຍສຳພັນແບບອານານິຄົມຢ່າງກົງໆ. ມັນບໍ່ແມ່ນແຕ່ເລື່ອງທີ່ວ່າ ຊາວຕ່າງຊາດຢຽບຍ່ຳພື້ນເຮືອນ ແລະເດີ່ນລານວັດທີ່ກ້ຽງງາມ ຍ້ອນການເຊັດຖູດ້ວຍຝ່າຕີນເປົ່າຊື່ໆ ແຕ່ ມັນແມ່ນການສະແດງອອກເຖິງຄວາມເໜືອກວ່າທາງດ້ານວັດທະນະທຳ ແລະຄວາມອະຣິຍ້ຽດ ວັດທະ ນະທຳແບບຊາວພຸດ, ມັນບໍ່ຕ່າງຫຍັງກັນເລີຍ ຖ້າຫາກວ່າຊາວພະມ້າ ດີ້ດ້ານເຂົ້າໄປໃນໂບດອັງກິດ ດ້ວຍ ຕີນເປົ່າ ສຸບຫມວກ ແລະສູບກອກຢ່າໃບຕອງແຫ້ງ ໃນປີ 1916 ການຂັດແຍ່ງ "ເລື່ອງການໃສ່ເກີບ" ຄ້າຍຄື ກັບເຫດການເມື່ອເຄິ່ງສະຕະວັດກ່ອນ, ເບິ່ງໃນດ້ານນຶ່ງ ກໍໄດ້ກາຍເປັນບັນຫາທາງການເມືອງໄປ ເປັນການ ທ້າທາຍ ຕໍ່ສິດທິຂອງອັງກິດ ທີ່ຕ້ອງປົກຄອງຕາມຮູບແບບທີ່ຕົນເອງກຳນົດຂຶ້ນເທົ່ານັ້ນ. ເທື່ອນີ້ ຫລັງຈາກ ສາຂາສະມາຄົມເຍົາວະພຸດທັງຫມົດຫ້າສິບແຫ່ງ ໄດ້ກໍ່ຄວາມວຸ່ນວາຍຢູ່ໃນທຸກໆເມືອງແລ້ວ ຊາວພະມ້າ ກໍເປັນຝ່າຍມີໄຊ. ໃນປີ 1818 ລັດຖະບານໄດ້ອອກລະບຽບໃຫ້ເຈົ້າອາວາດວັດ ເປັນຜູ້ກຳນົດ ກົດເກນກ່ຽວກັບ ການນຸ່ງຖືທີ່ເຫມາະສົມສຳລັບວັດຕົນເອງ. ຄວາມສຳຄັນຂອງໄຊຊະນະໃນຄັ້ງນີ້ສາມາດ ວັດແທກໄດ້ຈາກ ການຮັບປະກັນຕົນເອງ ແລະການຈັດຕັ້ງທີ່ຫມຸນໃຊ້ອົງການສະມາຄົມໃນການແກ້ບັນຫາ ໂດຍສະເພາະ ບັນ ຫາການເມືອງຢູ່ໃນຊຸມປີຕໍ່ມາ.

ມາຮອດທ້າຍປີ 1916 ທັງໆທີ່ມີເຟືອງແຫ້ງຜັດປ່ວນຢູ່ໃນກະແສລົມ ກຳມະການຊຸດນຶ່ງທີ່ໄດ້ຮັບ ແຕ່ງຕັ້ງ ໂດຍລັດຖະບານອານານິຄົມ ເພື່ອພິຈາລະນາການປະຕິຮູບການເມືອງ ກໍຍັງເຫັນວ່າບໍ່ມີ ຄວາມຈຳເປັນອີ່ຫຍັງຫລວງຫລາຍທີ່ຈະປ່ຽນແປງ. ເມື່ອການປ່ຽນແປງລະເບີດຂຶ້ນຢູ່ອິນເດຽ ພວກຊົນຊັ້ນ ສູງໃນພະມ້າ ຈຶ່ງແນມເຫັນຄວາມເປັນໄປໄດ້ໃນທັນທີ ສຳລັບພະມ້າ.ໃນປີ1917 ລັດຖະບານອັງກິດ ຢູ່ລອນ ດອນ ໄດ້ປະກາດເຈດຕະນາລົມຂອງຕົນ ທີ່ຈະມຸ່ງຫນ້າໄປສູ່ການຫັນປ່ຽນເປັນລັດຖະບານປົກຄອງຕົນເອງ ທີ່ມີອິດສະລະຫລາຍກວ່າຢູ່ອິນເດຽ. ສະມາຄົມຊາຍຫນຸ່ມຊາວພຸດ (YMBA) ໄດ້ຕອບສະຫນອງ ໂດຍ ຮຽກຮ້ອງໃຫ້ພະມ້າແຍກຕົວອອກຈາກອິນເດຽ. ການອົບພະຍົບເຂົ້າມາ ຂອງຄົນອິນເດຽແບບບໍ່ເຂັ້ມງວດ, ຄວາມບໍ່ເຫມາະສົມຂອງກົດຫມາຍອິນເດຽ ແລະລະບົບບໍລິຫານ, ການນຳໃຊ້ລາຍຮັບຈາກພາສີອາກອນ ທີ່ເຫລືອໃນພະມ້າ ໄປຊ່ວຍລັດຖະບານອິນເດຽ ກໍດີ, ທ່າທາງທີ່ສະແດງວ່າ ການປົກຄອງພະມ້າ ອາດຕົກ ໄປຢູ່ໃນມືຂອງນັກການເມືອງອິນເດຽ ກໍດີ ນັບເປັນສ່ວນນຶ່ງຂອງຄວາມເຈັບຊ້ຳທີ່ພວກຜູ້ນຳຂອງ ສະມາຄົມ ຮູ້ສຶກວ່າ ຄວນຕ້ອງຖືກແກ້ໄຂ. ຕາມລາຍງານໃນປີ 1918, ຄະນະກຳມະການຮ່ວມ ເພື່ອການປະຕິຮູບ ລັດ ຖະທຳມະນູນ ຂອງອິນເດຽ, ໄດ້ຮັບຮູ້ເຖິງຄວາມຍຸຕິທຳແຫ່ງຂໍ້ສະເໜີແບບນີ້: "ພະມ້າບໍ່ ແມ່ນ ອິນເດຽ", ຄະນະກຳມະການໄດ້ຕັດສິນໃຈ ແລະຢັ້ງຢືນວ່າ "ບັນຫາການວິວັດທາງການເມືອງ ຂອງ ພະມ້າ ຄວນຕ້ອງ ໂຈະໄວ້ພິຈາລະນາຕ່າງຫາກ ໃນອະນາຄົດ". ການພິຈາລະນາແນວນີ້ ປາກົດອອກ ໃນຮ່າງໂຄງການການ ປະຕິຮູບທີ່ສະເໜີຂຶ້ນ ໂດຍຂ້າຫລວງອັງກິດໃນ ຢ່າງກຸ້ງ ເມື່ອທ້າຍປີ 1918, ດ້ວຍ ການຊຸກຍູ້ເດັດດ່ຽວ ຢ່າງດຽວວ່າ ການປົກຄອງຕົນເອງໃນທ້ອງຖິ່ນ ຕ້ອງໄດ້ຮັບການສະຫນັບສະຫນຸນ ເຂັ້ມແຂງຢູ່ຂັ້ນເມືອງ ໂດຍໃຫ້ແຕ່ງຕັ້ງເອົາຄະນະກຳມະການທີ່ໄດ້ຮັບເລືອກຕັ້ງມາ ຂະນະທີ່ສະພານິຕິບັນຍັດ (61% ເລືອກຕັ້ງ ໂດຍທາງອ້ອມ ແລະມີສຽງສ່ວນໃຫຍ່ຖ້ວມ ເພື່ອສະຫນັບສະຫນຸນຜົນປະໂຫຍດ ຈາກການຄ້າຂາຍໃນເມືອງ ແລະຕ່າງປະເທດ) ນັ້ນ ຕ້ອງຕັ້ງຕົວຢູ່ເປັນພຽງທີ່ເປີກສາເທົ່ານັ້ນ. ເຖິງແນວໃດກໍດີ ຂໍ້ສະເໜີເຫລົ່ານີ້ ກໍຖືກ ຢຽບຍ່ຳຈົມລົງ ຍ້ອນການຂະຫຍາຍຕົວຂອງເຫດການ ຢູ່ອິນເດຽ ແລະການຄັດຄ້ານຕໍ່ຕ້ານ ຢູ່ໃນພະມ້າ ເອງ.

ເມື່ອສະດຸ້ງວ່າ ການແຍກຕົວອອກຈາກອິນເດຽໃນຄັ້ງນີ້ ອາດຫມາຍເຖິງການພາດໂອກາດອັນ ໃຫຍ່ຫລວງກວ່າເກົ່າອີກ ໃນການປົກຄອງຕົນເອງ ເຊິ່ງຕ້ອງຮັບປະກັນໃຫ້ແກ່ແຂວງອື່ນໆນຳນັ້ນ ພວກສະ ມາຊິກຫນຸ່ມຂອງສະມາຄົມ ໂດຍໄດ້ມີສະມາຄົມອື່ນໆມາຮ່ວມນຳ ໄດ້ພ້ອມກັນໂຈມຕີຂໍ້ສະເໜີ ປະຕິຮູບ ເຫລົ່ານັ້ນ. ໃນປີ 1919 ແລະ 1920 ພວກເຂົາໄດ້ສົ່ງຜູ້ແທນໄປລອນດອນ, ພວກເຂົາໄດ້ຮັບການຍອມຮັບ ຈາກອັງກິດ ໃນຫຳນອງດຽວກັນ ຄືມີລັດຖະທຳມະນູນການປົກຄອງ ແບບທະວາທິປະໄຕ (ສອງຝ່າຍ

dyarchy) ພາຍໃຕ້ລັດຖະທຳມະນູນນີ້ ຫນ້າທີ່ສະເພາະບາງອັນຂອງລັດຖະບານອາດຈະຕ້ອງໂອນໄປໃຫ້ ລັດຖະມຸນຕີພະມ້າສອງຄົນ ຮັບຜິດຊອບສະພານິຕິບັນຍັດ ທີ່ມີສະມາຊິກຫລາຍກວ່າ. ຢ່າງໃດກໍດີ, ຂະນະ ທີ່ສະມາຊິກຕົວແທນຂອງພະມ້າ ເວົ້າຢູ່ລອນດອນພຸ້ນ ພວກຮັກຊາດພະມ້າ ຊ້ຳກຳລັງປະທ້ວງຢູ່ຕາມ ຖະຫນົນຫົນທາງ ເພື່ອໃຫ້ໄດ້ລັດຖະບານປົກຄອງຕົນເອງ ໃນລະດັບໃຫຍ່ກວ່າທີ່ອັງກິດຄາດຫວັງວ່າຈະ ມອບໃຫ້.

ທຳອິດ ຄວາມວຸ່ນວາຍໃນພະມ້າສຸມໃສ່ເລື່ອງກົດລະບຽບທີ່ສະເຫນີເປັນນະໂຍບາຍຂອງມະຫາ ວິທະຍາໄລຢ່າງກຸ້ງ ເຊິ່ງຈະບັງຄັບໃຊ້ໃນປີ 1920. ໂດຍທີ່ທາງສະມາຄົມຊາຍຫນຸ່ມຊາວພຸດເອງ ໄດ້ເກີດ ແຕກແຍກກັນອອກເປັນສອງຝ່າຍ ລະຫວ່າງຜູ້ຫນຸ່ມນ້ອຍກວ່າ ທັງແຂງຂັນກວ່າ ທີ່ເປັນຝ່າຍສ່ວນຫລາຍ ກັບພວກຫົວນິຍົມຮີດເດີມ, ຈຶ່ງຕັ້ງຊື່ຂຶ້ນໃຫມ່ວ່າ ສະພາກາງຂອງສະມາຄົມພະມ້າ (General Council of Burmese Associations/ GCBA), ໂດຍມີກິດຈະກຳທີ່ສະແດງບອກຄວາມເປັນຊາດນິຍົມ ແລະມີເປົ້າ ຫມາຍທາງການເມືອງ ໂດຍສະເພາະແລ້ວສະພາກາງແຫ່ງນີ້ (GCBA) ກໍໃຫ້ການສະຫນັບສະຫນຸນ ແກ່ການປະທ້ວງທີ່ຈັດຂຶ້ນໂດຍນັກສຶກສາມະຫາວິທະຍາໄລໃຫມ່, ບໍ່ດົນການປະທ້ວງກໍແຜ່ກະຈາຍອອກໄປ ທົ່ວທຸກ ໂຮງຮຽນລັດຖະບານແລະໂຮງຮຽນເຜີຍແຜ່ສາດສະຫນາບາງບ່ອນ. ບັນຫາທີ່ຕັ້ງຂຶ້ນແມ່ນ ມະຫາ ວິທະຍາໄລ ຈະເປັນສະຖາບັນແຫ່ງດຽວຫລືບໍ່ ທີ່ຈະຕ້ອງເຂົ້າຮ່ວມການປະທ້ວງນີ້ ຫລືວ່າ ມີນັກຮຽນທີ່ມີ ມາດຖານການສຶກສາຕ່ຳກວ່າ ແຕ່ມີຈຳນວນຫລາຍກວ່າ ກໍສາມາດເຂົ້າຮ່ວມນຳໄດ້. ເຖິງແມ່ນວ່າ ຈະບໍ່ ເຮັດໃຫ້ ລັດຖະບານປ່ຽນແປງຫຍັງໃນຂັ້ນພື້ນຖານ ໃນການຮັບເອົານັກສຶກສາເຂົ້າຮຽນໃນມະຫາວິທະຍາ ໄລ ຫລື ຮັບຮູ້ສິດທິຂອງປະຊາຊົນພື້ນເມືອງໃນການກວດກາການສຶກສາ, ການປະທ້ວງມີຜົນໃຫ້ມີການ ປຸກສ້າງ ໂຮງຮຽນແຫ່ງຊາດຂຶ້ນໃນທົ່ວປະເທດ.ໂຮງຮຽນເຫລົ່ານີ້ ໄດ້ຫາວິທີການໃຫ້ນັກຮຽນໄດ້ຮັບການ ສຶກສາແບບສະໄຫມໃຫມ່ ທີ່ຢູ່ນອກເຫນືອການຄວບຄຸມຂອງລັດ, ເຖິງແມ່ນວ່າໃນຂັ້ນຕໍ່ມາ ເພື່ອໃຫ້ໄດ້ການ ຊ່ວຍເຫລືອທາງການເງິນຈາກລັດຖະບານ, ໂຮງຮຽນແຫ່ງຊາດ ກໍຕ້ອງຕົກຢູ່ພາຍໃຕ້ການຕິດຕາມກວດ ກາ ຂອງລັດຖະບານ.

ການເຄື່ອນໄຫວທາງການເມືອງ ທີ່ຕັ້ງຕົ້ນດ້ວຍການປະທ້ວງຢູ່ມະຫາວິທະຍາໄລ ແລະການຂວ້ຳ ບາດ ໃນປີ 1921 ດຳເນີນຕໍ່ມາຕະຫລອດທົດສະວັດ ໄດ້ດຶງເອົາສາທາລະນະຊົນເຂົ້າຮ່ວມນັບມື້ນັບຫລາຍ ຂຶ້ນ ທັງຄົນໃນຕົວເມືອງແລະຊົນນະບົດ. ສະພາກາງສົ່ງເສີມອົງການຈັດຕັ້ງນັກຊາດນິຍົມຂັ້ນບ້ານເຊັ່ນອົງ ການ ຈັດຕັ້ງທີ່ຊື່ວ່າ ຫວຸນຖະນຸ ອາຖິນ (wunthanu athin/ own race societies) ຫລື ສັງຄົມເຊື້ອຊາດ ເຮົາເອງ ອົງການເຫລົ່ານີ້ ຈັດຕັ້ງຂຶ້ນເພື່ອຂວ້ຳບາດພະນັກງານຂອງລັດ ໂຮມທັງພວກພໍ່ບ້ານ ແລະພວກ ຫົວຫນ້າຫົວຮຸນແຮງທີ່ສຸດຂອງເຂົາ ໄດ້ສະຫນັບສະຫນຸນຊາວນາ ຜູ້ພວມຊອກຫາວິທີບັນເທົາທຸກຄວາມ ຫຍຸ້ງຍາກທາງເສດຖະກິດ ໂດຍການປະຕິເສດບໍ່ເສຽຄ່າພາສີແລະຄ່າເຊົ່າດິນ. ທັງຢູ່ພາຍໃນກຸ່ມ ແລະ ພາຍນອກ ກຸ່ມເຫລົ່ານີ້ ພຣະສົງອົງຫນຸ່ມໆທັງຫລາຍ ນັບມື້ນັບມີບົດບາດຫລາຍຂຶ້ນ ໃນການສ້າງຄວາມ ວຸ່ນວາຍທາງ ການເມືອງ, ໃນປີ 1922 ພວກພະສົງ ສ້າງຕັ້ງຜູ້ນຳທາງການເມືອງລະດັບຊາດຂອງຕົນຂຶ້ນ ເອງຢູ່ໃນສະພາກາງແຫ່ງນຶ່ງ ສຳລັບພຣະສົງ ເພື່ອຊີ້ນຳວຽກງານອັນນີ້. ພຣະສົງອົງຫ້າວຫັນຈິງຈັງໃນ ຊຸມປີ 1920 ໄດ້ໂຈມຕີການປົກຄອງ ຂອງຕ່າງຊາດ, ພວກນາຍບ້ານ ສະຖານີຕຳຫລວດ ແລະສານ, ນາຍ ພາສີ ແລະຄົນອິນເດຍ, ເບິ່ງໃນແງ່ນຶ່ງ ກໍຄືກັບພຣະສົງທີ່ຕໍ່ຕ້ານຄັດຄ້ານອັງກິດໃນຊຸມປີ1880 ແລະກ່ອນ ຫນ້ານີ້ນຳ: ການກະທຳຂອງພຣະສົງເຫລົ່ານີ້ ແມ່ນການປ້ອງກັນຕົນເອງຕາມຖານະ ທີ່ອີງໃສ່ຄຸນຄ່າທາງ ສັງຄົມຕາມປະເພນີ ແຕ່ການຈັດຕັ້ງ, ກົນລະຍຸດ ແລະບັນຫາສຳຄັນຂອງພວກເຂົາ ລ້ວນແຕ່ເປັນສິ່ງໃຫມ. ສິ່ງມີຄວາມສຳຄັນ ແລະທີ່ບໍ່ຄືກັບຊົນຊັ້ນນຳການເມືອງໃນຕົວເມືອງ ຢູ່ສະພາກາງ ແລະພັກພວກຂອງ ພວກເຂົາ ກໍແມ່ນວ່າ ພຣະສົງນັກການເມືອງເຫລົ່ານີ້ ຄົງຕົວຢູ່ຢ່າງໃກ້ຊິດກັບຊົນຊັ້ນຊາວນາ ພາຍໃນ ສະມາຄົມ ຫວຸ່ນຖະນຸອາຕິນ.

ການນຳເອົາລະບອບລັດຖະທຳມະນູນແບບທະວິທີປະໄຕມາໃຊ້ໃນປີ1923ໄດ້ກໍ່ໃຫ້ເກີດ ຄວາມເຄັ່ງ ຕຶງໃຫ້ແກ່ສຳພັນທະພາບລະຫວ່າງຊົນຊັ້ນສູງໃນເມືອງ ກັບພວກຫົວໜ້າຢູ່ຊົນນະບົດ ບໍ່ວ່າຈະແມ່ນຝ່າຍ ສາສະໜາ ຫລື ຝ່າຍຄະລຶຫັດກໍດີ. ພາຍໃຕ້ການຈັດສັນແບບນັ້ນ ໄດ້ມີການຕັ້ງສະພານິຕິບັນຍັດຂຶ້ນ ມີ ສະມາຊິກທີ່ໄດ້ຮັບຄັດເລືອກເຂົ້າມາ 80 ຄົນ ໃນຈຳນວນສະມາຊິກທັງໝົດ 103 ຄົນ, ຈາກ 80 ຄົນ ນັ້ນ ມີ 15 ຄົນເລືອກມາຈາກໜ່ວຍເລືອກຕັ້ງຂັ້ນເຂດຄຸ້ມຊຸມຊົນ (ມີອິນເດຽ 8, ກະຫຣ່ຽງ 5, ລູກຊອດອັງກິດ -ອິນເດຽ 1) ດັ່ງນັ້ນຈຶ່ງເຮັດໃຫ້ພະມ້າມີຄວາມຫລາກຫລາຍດ້ານຊົນຊາດຊົນເຜົ່າ. ສະມາຊິກ 2 ຄົນໃນ 4 ຂອງສະພາເຈົ້າແຂວງ ຖືກກຳນົດມາໂດຍສະພານິຕິບັນຍັດ ແລະໃຫ້ປະຕິບັດໜ້າທີ່ຮັບຜິດຊອບດ້ານ ກະສິກຳ ດ້ານພາສີອາກອນ ສາທາລະນະສຸກ ໂຍທາທິການ ປ່າໄມ້ ແລະການສຶກສາ. ອັນທີ່ສະຫງວນໄວ້ ສຳລັບເຈົ້າແຂວງ ແມ່ນການຄວບຄຸມກວດກາການປົກຄອງສູນກາງ ສານຕຳຫລວດ ພາສີທີ່ດິນ ແຮງ ງານ ແລະການເງິນ ຮວມທັງ "ເຂດພິເສດ" (ກະເຣນນີ, ລັດສານ ແລະ ກະຊິນ ກັບ ເຂດພູດອຍ ຊິນ) ສ່ວນລັດຖະບານກາງອິນເດຽ ກວດກາຄວບຄຸມການປ້ອງກັນປະເທດ ຄວາມສຳພັນລະຫວ່າງຊາດ ການ ຄົມມະນາຄົມ ການກວດກາຄົນເຂົ້າເມືອງ ແລະພາສີລາຍໄດ້. ການເລືອກຕັ້ງເຂົ້າໄປຢູ່ໃນສະພາ ນິຕິບັນ ຍັດຄັ້ງທຳອິດ ໃນປີ 1922 ເຮັດໃຫ້ຊົນຊັ້ນສູງພະມ້າແຕກແຍກກັນເປັນສອງຝ່າຍ ໃນເລື່ອງບັນຫາ ການເຂົ້າ ຮ່ວມ ຫລືຮ່ວມມືນຳ ລັດຖະທຳນູນສະບັບທີ່ບໍ່ສາມາດຮັບເອົາໄດ້ເລີຍ. ພວກສະມາຊິກສ່ວນຫລາຍ ຂອງ ສະພາອອກໜ້າໂດຍ ອູ ຈິດ ຫລຽງ (U Chit Hlaing) ໄດ້ຂວ້ຳບາດ ການ ເລືອກຕັ້ງ ສ່ວນພວກລູກນ້ອງ ຈຳນວນຫລາຍ ນຳພາໂດຍ ອູ ບາ ເປ (U Ba Pe) ໄດ້ຕັ້ງພັກຊື່ "ພັກ 21" (21 Party) ເພື່ອແຂ່ງຂັນ ການເລືອກຕັ້ງ ໂດຍໄດ້ຮັບຄະແນນສຽງພໍດີຕ່ຳກວ່າເຄິ່ງຂອງຈຳນວນບ່ອນນັ່ງ ຂອງພວກທີ່ບໍ່ແມ່ນມາຈາກ ຊຸມຊົນ; ອັດຕາສ່ວນຂອງຜູ້ມີສິດເລືອກຕັ້ງທີ່ມາອອກສຽງເລືອກຕັ້ງມີໜ້ອຍກວ່າ 7%, ການແຕກແຍກກັນ ໃນສະພາ (GCBA) ສະທ້ອນອອກໃຫ້ເຫັນໃນສາຂາຕ່າງໆຂອງອົງການ ຈັດຕັ້ງ ແລະຢູ່ໃນຂັ້ນບ້ານ ຫວ່ານ ຖະນຸອາຕີນ. ຜົນໄດ້ຮັບ ກໍຄືການແຕກແຍກທາງການເມືອງ ເຊິ່ງໃນນັ້ນ ມີພວກນັກສວຍໂອກາດແດ່, ຜູ້ຄົນ ທີ່ຕ່າງຮຸ່ນອາຍຸກັນ, ພື້ນຖານການສຶກສາຕ່າງກັນ ມີຄວາມກັງວົນດ້ານ ເສດຖະກິດຕ່າງກັນ, ກົນວິທີທາງ ການເມືອງແຕກຕ່າງກັນຢ່າງຂາດຂັ້ນ ແລະກຳລັງອື່ນໆກໍໄດ້ສະແດງ ບົດບາດອີກຕ່າງຫາກ, ອັນໄດ້ແບ່ງ ແຍກທັງຊົນຊັ້ນສູງໃນຊົນນະບົດ ແລະໃນສັງຄົມຂັ້ນບ້ານ. ທຸກຄົນເຫັນພ້ອມວ່າ ຈຳເປັນຕ້ອງມີການປ່ຽນ ແປງ ແຕຫລາຍຄົນກໍແຕກຕ່າງກັນໃນດ້ານທ່າທີ ທາດແທ້ທຳມະຊາດຂອງໃຜລາວ ແລະພຶດຕິກຳອັນ ເໝາະສົມທີ່ຄວນຍຶດຖືປະຕິບັດ. ສຽງສ່ວນຫລາຍເຫັນວ່າຂະບວນການ ທາງການເມືອງແບບທາງການນີ້ ບໍ່ສອດຄ່ອງກັບຄວາມຫວັ່ນວິຕົກຂອງພວກເຂົາ ແມ່ນແຕ່ໃນການເລືອກ ຕັ້ງປີ 1925 ແລະ 1928 ເມື່ອ ອູ ຈິດ ຫລຽງ ແລະນັກຂວ້ຳບາດອື່ນໆ ໄດ້ກ້າວເຂົ້າສູ່ເວທີເລືອກຕັ້ງ ອັດຕາສ່ວນຂອງຜູ້ມາອອກສຽງ ກໍຍັງ ບໍ່ລຶ່ນ 18 %.

ແນວຄວາມຄຶດ ແລະຄວາມສົນໃຈ ທີ່ຊຸກຍູ້ສົ່ງເສີມຂະບວນການຊາດນິຍົມຢູ່ໃນພະມ້າ ກ່ອນປີ 1942 ສະທ້ອນໃຫ້ເຫັນຄວາມສົນໃຈອັນແຕກຕ່າງກັນ ຂອງຊົນຊັ້ນນຳທາງການເມືອງຢູ່ໃນເຂດຕົວເມືອງ ກັບຫົວ ໜ້ານຳພາຂັ້ນບ້ານ ໃນເຂດຊົນນະບົດ. ຈຸດສຳຄັນຂອງບັນຫາ ທີ່ເຮັດໃຫ້ຊົນຊັ້ນສູງຫວັ່ນໄຫວ ອັນທຳອິດ ແມ່ນບັນຫາທີ່ຖືກກຳນົດໃນດ້ານໂຄງສ້າງດ້ານການເມືອງແລະດ້ານການບໍລິຫານ ທີ່ແຕ່ງຕັ້ງ ຂຶ້ນໄວ້ໂດຍ ລັດອານານິຄົມ. ເປົ້າໝາຍຂອງໂຄງສ້າງນັ້ນແມ່ນເພື່ອຫາຄົນມາແທນພວກອັງກິດ ແລະ ຍຶດເອົາໂຄງສ້າງ ເຫລ່ານັ້ນມາເປັນຂອງຕົນເອງໃນນາມປະຊາຊົນພະມ້າ. ສຳລັບນາຍບ້ານ ແລະຜູ້ຕິດ ຕາມຊາວນານັ້ນ, ລັດທິຊາດນິຍົມມີຄວາມໝາຍບໍ່ພຽງແຕ່ວ່າ ເອົາປະເທດຊາດອອກພົ້ນຈາກຊົນຊັ້ນປົກ ຄອງຕ່າງຊາດ ແຕ່ຍັງໝາຍເຖິງບັນດາສະຖາບັນລາຊະການ ແລະເສດຖະກິດທີ່ພວກເຂົານຳເອົາເຂົ້າ ມາໃຊ້ນຳອີກ. ການລຸກຮືຂອງພວກຊາວນາຍັງຄົງດຳເນີນຕໍ່ມາ ແລະຂະຫຍາຍຕົວອອກເລື້ອຍໆ ໃນລະ ຫວ່າງຊຸມປີ 1920 ແຕ່ທີ່ພວກຊົນຊັ້ນສູງໃນເມືອງ ສາມາດເຮັດໄດ້ເພື່ອແກ້ໄຂບັນຫາຂອງຕົນເອງນັ້ນ ມີແຕ່ ໜ້ອຍດຽວເທົ່ານັ້ນ ແລະຄວາມບໍ່ໄວ້ເນື້ອເຊື່ອໃຈລະຫວ່າງສອງພວກກໍນັບທະວີແຮງຂຶ້ນ. ການຄອບງຳ

ຊົນຊັ້ນນຳທາງການເມືອງ ໂດຍນັກກົດໝາຍກັບຜູ້ອື່ນໆ ທີ່ຜ່ານການອົບຮົມດ້ານສິນລະປະ ແຫ່ງການ ປະນີປະນອມ ແລະການເຈລະຈາ ປາກົດແກ່ສາຍຕາປະຊາຊົນຈຳນວນຫລາຍ ວ່າເປັນສັນຍະລັກແຫ່ງ ຄວາມເປັນຈິງທີ່ວ່າ ມີແຕ່ພຶດຕິກຳອັນຮ້າຍແຮງເທົ່ານັ້ນ ຈຶ່ງຈະສາມາດແກ້ໄຂຄວາມຂັດຂ້ອງ ຂອງພວກ ເຂົາໄດ້.

ການເມືອງໃນພະມ້າ ລະຫວ່າງຊຸມປີ 1920 ຈຶ່ງເບິ່ງຄືວ່າມີຊີວິດຊີວາດີ. ພວກຊົນຊັ້ນສູງແບ່ງ ແຍກແຕກກັບຢ່າງໄວວາ ເປັນຫລາຍພັກຫລາຍຝ່າຍຍິບຍ່ອຍ. ໃນສະພານິຕິບັນຍັດ ຜູ້ແທນພັກການ ເມືອງຊາດນິຍົມ ທີ່ມີຫລາຍຂຶ້ນໆ ໃນການເລືອກຕັ້ງແຕ່ລະຊຸດນັ້ນ ມີໜ້າທີ່ພຽງເພື່ອຈັດສົ່ງຜູ້ແທນຂອງ ຊຸມຊົນເຂົ້າ ໄປຢູ່ໃນຖັນແຖວລັດຖະບານ ແລະເພື່ອໃຫ້ໄດ້ສຽງສ່ວນຫລາຍ ມາຄັດຄ້ານຄົນພະມ້າເທົ່ານັ້ນ. ອັນນີ້ໝາຍ ຄວາມວ່າ ກົດໝາຍທີ່ຈະນຳມາໃຊ້ ເພື່ອປັບປຸງເງື່ອນໄຂຊີວິດການເປັນຢູ່ຂອງຊາວນາ ບໍ່ມີ ແມ່ນແຕ່ໂອກາດຈະຜ່ານ ຄວາມເຫັນຊອບຂອງສະພາເລີຍ. ໃນຂະນະດຽວກັນ ການເຄື່ອນໄຫວທາງ ການເມືອງຢູ່ຊົນນະບົດ ກໍໄດ້ທະວີຂຶ້ນຢ່າງຫລວງຫລາຍ ຍ້ອນວ່າ ມີພັກຝ່າຍການເມືອງຫລາຍຂຶ້ນ ແລະ ການກໍ່ຄວາມອຸບອາຍ ຂອງພຣະສົງນັກການເມືອງແລະພວກຫົວໜ້າ ຫວຸ່ນ ຖະນູ ອາຕີນ ອື່ນໆ. ຄວາມ ຮຸນແຮງ ຕໍ່ຕ້ານພະນັກ ງານລັດ ຮວມທັງພວກນາຍບ້ານນຳ ທະວີຂຶ້ນ ແລະ ລັດຖະບານ ກໍໄດ້ແຕ່ອາໄສ ພວກສາລະວັດທະຫານຂີ່ມ້າຖືອາວຸດ ນັບມື້ນັບຫລາຍຂຶ້ນ, ຄົນພວກນີ້ ໂດຍທົ່ວໄປເອີ້ນ ກັນວ່າ ຕຳຫລວດ ປາບປາມ ທັງນີ້ເພື່ອຄວບຄຸມສະຖານະການໄວ້.

ການເຄື່ອນໄຫວທາງການເມືອງໃນພະມ້າ ຖືກຈູດໃຫ້ລຸກໄໝ້ແຮງຂຶ້ນອີກ ຍ້ອນຜົນກະທົບຕໍ່ທ້ອງ ຖິ່ນເນື່ອງມາຈາກການຕົກຕ່ຳທາງເສດຖະກິດໂລກ. ລາຄາເຂົ້າຕົກລົງ ຫລາຍກວ່າເຄິ່ງນຶ່ງ ໃນລະຫວ່າງ ປີ 1928 ແລະ 1931, ໃນຂະນະທີ່ຄ່າເຊົ່າດິນ ການໃຊ້ໜີ້ຄືນ ຄ່າພາສີ ແລະລາຄາສິນຄ້າຈຳເປັນ ທີ່ນຳ ເຂົ້າຈຳນວນຫລາຍ ຜັດຫລຸດລົງຊ້າ ຫລືບໍ່ຫລຸດລົງຊໍ້າ. ການຍຶດໂອນເອົາດິນຈອງຈຳ ປະມານສອງລ້ານ ເອເຄີ ໃນພື້ນທີ່ດິນກະສິກຳ ລະຫວ່າງປີ 1929 ຫາ 1934 ເກືອບເທົ່າ 20 % ຂອງພື້ນທີ່ດິນກະສິກຳ ທັງ ໝົດໃນເຂດ ປາກແມ່ນ້ຳນັ້ນ ເປັນອາການຜົ້ນເດັ່ນທີ່ສຸດຂອງວິກິດການກ່ຽວກັບທີ່ດິນປູກຝັງຂອງຊາວນາ. ຄວາມເຄັ່ງຕຶງລະເບີດຂຶ້ນ ໃນລະຫວ່າງການເກີດຈະລາຈົນຕໍ່ຕ້ານຊາວອິນເດຽ ທີ່ເລີ່ມຕົ້ນຢູ່ ຢ່າງກຸ້ງ ເມື່ອ ເດືອນພຶດສະພາ 1930 ແລ້ວຍ້າຍອອກໄປສູ່ຊົນນະບົດໃນປີຕໍ່ມາ ເພື່ອສ້າງຄວາມສັບສົນ ອຸບອາຍ ແລະ ເປັນການເປີດບັ້ນຕໍ່ຕ້ານ ລັດທິອານານິຄົມຢ່າງຈະແຈ້ງ.

ການລະເບີດຄັ້ງຮ້າຍແຮງສຸດ ແມ່ນການລຸກຮືຂອງຊາວນາ ທີ່ແຕກພຸຂຶ້ນຢູ່ເມືອງທະວາຣະວະດີ ໃນເດືອນທັນວາ ປີ 1930, ຫົວໜ້າກໍ່ການແມ່ນ ຫັສຍະ ຊັນ (Hsaya San) ອະດີດພຣະສົງອົງນຶ່ງທີ່ເປັນ ໝໍຢາພື້ນເມືອງ ແລະທັງເປັນນັກຈັດຕັ້ງຜູ້ເຂັ້ມແຂງຄົນນຶ່ງສຳລັບພັກຝ່າຍນິຍົມຊົມຊອບຊາວນາກວາໜູ ຂອງສະພາ. ພາຍໃຕ້ການສະໜັບສະໜຸນຂອງສະພາໃນປີ 1927-28 ເຂົາໄດ້ສຳຫລວດກວດກາຢ່າງຮອບ ດ້ານສະພາບຊີວິດການເປັນຢູ່ຂອງຊາວນາກັບຄວາມຂັດຂ້ອງຂອງພວກເຂົາ ຕໍ່ການປົກຄອງອານານິຄົມ. ການລຸກຮືຂອງເຂົາຈັດຕັ້ງຂຶ້ນ, ຕາມອຸດົມການຂອງເຂົາເອງ ພໍຮອດຊຸມທ້າຍປີ 1920 ຄົນສ່ວນຫລາຍ ເຫັນວ່າການຈັດຕັ້ງຂັ້ນບ້ານຂອງສະພາ (GCBA) ແລະສະມາຄົມ ຫວຸ່ນ ຖານຸ ອາຕີນ ວ່າເປັນຄວາມ ຫວັງອັນດຽວທີ່ຈະຍຸຕິເງື່ອນໄຂອັນຕ່ຳຕ້ອຍທາງເສດຖະກິດ ແລະການເມືອງຂອງຊົນຊັ້ນຊາວນາໄດ້. ການ ເກັບພາສີ, ອາຊະຍາກຳ ລາຄາເຂົ້າ ການປ່ຽນເຈົ້າຂອງຕາດິນ ການອົບພະຍົບເຂົ້າມາຂອງຊາວອິນເດຽ ການບໍ່ມີວຽກເຮັດ ໂຮມທັງການໂຈມຕີ ພຸດທະສາສະໜາ ທັງໝົດນີ້ ຖືກເບິ່ງວ່າ ແມ່ນໝາກຜົນ ແຫ່ງ ການປົກຄອງຂອງອານານິຄົມ. ສະມາຄົມ ຫວ່ນ ຖານຸ ອາຕີນ ໄດ້ຊີ້ແຈງໃຫ້ຊົນຊັ້ນຊາວນາ ເຫັນວ່າ ມີແຕ ການປະທ້ວງແບບມີການຈັດຕັ້ງຢ່າງດີ ໃນນາມພວກເຂົາເອງເທົ່ານັ້ນ ຈຶ່ງຈະເຮັດໃຫ້ມີການປ່ຽນແປງ ສະພາບຊີວິດການເປັນຢູ່ຂອງພວກເຂົາ. ໃນການປະທ້ວງນີ້ ມີພຣະສົງນັກການເມືອງ ມາເຂົ້າຮ່ວມນຳ.

ພວກຊາວນາໄດ້ທຳພິທີຕ້ອນຮັບ ອູ ຈິດ ຫລຽງ ຜູ້ນຳຂອງສະພາ ໂດນແຫ່ແຫນດ້ວຍຂະບວນຊ້າງ ເອ້ຍ້ອງຢ່າງເຕັມຍົດ ແບບລາຊະພິທີ ເພື່ອເປັນການໃຫ້ກຽດແກ່ເຂົາຕາມປະເພນີ, ຍົກເຂົາຂຶ້ນເປັນສັນ

ยะลัภ ยู่ເหนือคົนอื่นๆในถานะผู้นำ. ทัสยา ชัน ถืภแทนแท่ ท้อมล้อมด้วยเถื่องปะดับ ยึดสันยะลัภแท่งวิงภะสัด ถื ลันธิ์มขาว. แต่ในขะนะที่พวมสะแดง ให้สายตาพายนอภเห็นสันยะลัภ และความเชื่อของสังคมพะม้ายุภหล้าหลัง ก่อนอานานิคม, ภานลุภธิ ผัดมิภานจัดตั้งแบบทันสะไหม และแนใส่แภ้ไขความขัดข้อง ในปัดจุบัน. ทัสยา ชัน ใช้เวลาสองปี ท่องถ่อไปตามเขดบ้านชานเมืองต่างๆ และชุภยู้ให้พวภชาวนา ลังมือปะติบัดภานในนามพวภเขาเอง, แต่ภานลุภธิ ภ็ได้ละเบิดขึ้นเอง และเมื่อมันเภิดขึ้นแล้ว ภ็ได้แผ่ลามย่างไวอา. มันเลิ่มขึ้นด้วย ภานโจมตีป้อมตำหลวด, ห้องภานป่าไม้ (เชิ่งเภือดห้ามชาวนา บ่ให้เข้าไปชอภยู่หาภินตาม ความเคียชิน ของพวภเขา เช่น ภานเภับฟืนและไม้สิด) ผ่บ้านผู้บ่ให้ความร่วมไม้ร่วมมื, และ ชาวอินเดย ภับคนจีน ที่พวภ ขะบิดชอภพ้. ภานลุภธิร้ายแรงขึ้นจินเถิงขั้นว่า ต้องสิ่งกำลัง เสิมมาจาภอินเดย, ดังนั้น จึ่งปาภิดว่ามิภองทะหานธอด 12,000 คน ลังสู่สะหนามปาบปาม ภานลุภธิ. เมื่อจับภุมพวภห็อหน้าได้ ตอนย่างเข้าสู่ท้ายปี 1931 นั้น ภานลุภธิเลิ่มร้อยกำลัง ลังแล้ว และได้แตภสะหลายไป ในภางปี 1932.

ภานลุภธิของ ทัสยา ชัน พิสูดให้เห็นความอะปะโหยดแห่งภานลุภธิของชาวนา เพื่อว่า ใผก็ตาม ที่อาดถืภยุยิงสิ่งเสิมให้เธัดขึ้น จะต้องเอ็าเป็นบิดธยม. อาวุดยุดโหปะภอบก็อึดยาภ และภองกำลังลัดถะบานก็เหนือภว่าหลาย ทังด้านอาวุดและภานเคื่อนย้าย (พวภลุภธิเสยชิวิดไป 3,000 คน, ลัดถะบาน 138) เถิงแนอใดก็ตาม, ก็บ่ถือว่า เป็นความลิ้มแหลอทังหมิดดอภ เผาะย่างหน้อย มันได้ส้างความตื่นตัวให้แก่มะหาชิน, ส้างตัวย่างภานเสยสะละ และความมุ่งหวังอันแรงก้า ในภานต่ต้านอานานิคม เชิ่งมิบ่เท่าใดคนเท่านั้น ที่จะเบิ่งข้ามได้ สอนอิภหลองหลาย ถือเอ็าเป็นเลื่องตำนานชิวิด. ภรดสักสิของลัดถะบาน ถืภภะทิบภะเทือนในขะนะที่ความเจับปวดของปะชาชินได้รับความเอ็าใจใส่ หลายแนอคิดปะติเสดนิยม กับความเมินเสียบ่เอ็าหัวชา ของลัดถะบาน ก็ถืภเปิดเผียออภแจ้ง.

เมื่ออังภิดเลิ่มพิจาละนาคืน ลัดถะทำมะนูนของอินเดย ในปี 1929 นั้น บันหาภานแบ่งแยภพะม้าออภจาภอินเดยก็ได้ถืภนำมาทิบทวนอิภ คะนะกำมะภาน ของซิมอน (Simon Commission) เชิ่งได้ลายงานภ่องกับเลื่องนี้ แนะนำให้แบ่งแยภออภ. ชาวพะม้าหลาย คนบ่ เชื่อในความตั้งใจของอังภิด ยังคิงย้านว่า อินเดยอาดได้รับอะนุยาดให้ปิภลองตินเอง หลายภว่าพะม้า และยังสิงไสว่า นักทุละภิดอังภิด จะนิยมชิมชอบ ภานแบ่งแยภ แท้บ่.

ย่างใดก็ตาม คนส่วนใหย่ยังเห็นว่า หินทางดยว ที่พะม้าจะสามาดยับยั้งภานอิบพะยิบของคนอินเดย เข้ามาในปะเทดของพวภเอ็าได้นั้น มิแต่ภานแบ่งแยภออภจาภกันเท่านั้น. บันหาภานแบ่งแยภได้ถืภหิดสอบ ยู่ในสะไหม เลือภตั้งใหย่ ปี 1932 เชิ่งในคั้งนั้น พวภต่ต้านภานแบ่งแยภ ได้รับไชยะนะสำคันเติบ ย้อนสะมาคม หวุน ถะนุ อาติน และภานสะหนับสะหนุนจาภพยะสิง พวภเอ็าได้ธอดสี่สิบสองบ่อนนั่ง ต่ 80 ตั่ง ในสะพา. ในเวลานั้น ติวแทนของนักทุละภิดอินเดย ที่มิเงินมาลังทึนหลายในพะม้า และได้ทุ่มเหย่างหลองหลาย เพื่อธับปะกับความปอดไพแห่งชับสินของติน. สะพานิติบันยัด บ่ก้าที่จะชี้บอภจะแจ้งว่า สะพา ชิมชอบภานยู่ติดพันภับอินเดย และในที่สุด เมื่อลัดถะบานอังภิด ยู่ลอนดอน ตัดสินใจเลือภภานแบ่งแยภ ก็บ่ได้มิภานปะท้องใดๆ ในพะม้า.

เพื่อให้สอดคล่องภับภานปะติธูบที่นำมาใช้ ยู่อินเดย ในเวลาดยวกันนั้น ในวันที 1 เมสา 1937 อังภิด จึ่งมอบลัดถะทำมะนูนสะบับที่มิลักสะนะเป็นปะชาทิปะไต สูงกว่าให้แก่พะม้าที่แยภติวแล้ว. ลัดถะทำมะนูนสะบับนี้ ให้อำนาดแก่คะนะลัดถะมุนติ ธับผิดชอบสะพาผู้แทนลาสะดอน ที่ธับเลือภเข้ามาทังหมิด พ้อมด้วยผู้แทนจาภเขดเลือภตั้ง 33 บ่อนติ่ม และ อิภ 7

ບ່ອນນັ່ງຈາກເຂດເລືອກຕັ້ງ ກະທຣ໋ຽງ ເພື່ອຊັ່ງຊາອຳນາດກັບສະມາຊິກສະພາສູງ ທີ່ມີສະມາຊິກ 36 ບ່ອນນັ່ງ ໃນນັ້ນ ເຄິ່ງນຶ່ງຕ້ອງໄດ້ຮັບເລືອກຈາກກຸ່ມຜູ້ຄົນ ທີ່ມີຖານະການເງິນຫມັ້ນຄົງ ແລະລາຍຮັບຫລາຍ. ແຕ່ອັນສະຫງວນໄວ້ສຳລັບເຈົ້າແຂວງ ກໍແມ່ນການກວດກາ "ຢູ່ເໜືອເຂດພິເສດ", ການປ້ອງກັນຊາດ, ການພົວພັນຕ່າງປະເທດ ແລະນະໂຍບາຍເງິນຕາ. ການເຄື່ອນໄຫວທາງການເມືອງ ໃນລະຍະມໍ່ໆ ການເລືອກຕັ້ງປີ 1936 ເຊິ່ງຈະເປັນການເລີ່ມຕົ້ນລະບຽບຫລັກການໃຫມ່ ເບິ່ງແລ້ວຄືວ່າຊັກຊ້າ ບໍ່ມີຄວາມຫມາຍ ປານໃດ ແລະສັບສົນຫລາຍກວ່າທີ່ເປັນຢູ່ໃນປີ 1932. ພວກນັກການເມືອງ ທີ່ຫາກໍໂຄສະນາຄັດຄ້ານການແບ່ງແຍກ ໃນປີ 1932 ໄດ້ກັບຄືນໄປສູ່ ເອກະສານລັດຖະສະພາ ທີ່ກົງກັນຂ້າມກັບທັດສະນະເດີມ ມີພຽງຫນ້ອຍຄົນ ທີ່ແນມເຫັນສິ່ງທີ່ຄວນຕ້ອງເຮັດ ເພື່ອຜ່ອນເບົາຄວາມຫຍຸ້ງຍາກໃນຊີວິດການເປັນຢູ່ຂອງຄົນຊົນນະບົດ ໃນເວລານັ້ນ, ຄວາມສົນໃຈຂອງພວກເຂົາ ແລະຄວາມສົນໃຈ ຂອງຊົນຊັ້ນຊາວນາເອງ ຄືວ່າ ຍິ່ງຫາງໄກອອກກວ່າແຕ່ເກົ່າ.

ນັບມື້ ພວກນັກການເມືອງ ຜູ້ຕັ້ງຕົວດີແລ້ວ ກໍຍິ່ງຖືກທ້າທາຍໃຫ້ແຂ່ງຂັນ ກັບພວກຄົນຫນຸ່ມກວ່າ ໃນຂະນະທີ່ພັກການເມືອງເກົ່າແກ່ຫັ້ງຫລາຍກໍແຕກແຍກກັນໄປ ເພາະມີອຳນາດຫລາຍຂຶ້ນ ແລະໂອກາດອຳນວຍກໍຫລາຍຂຶ້ນ ໃນການສ້າງກົນໄກທາງການເມືອງ ເຖິງແມ່ນວ່າໃນບໍ່ດົນ ກໍເປັນທີ່ຈະແຈ້ງວ່າສິ່ງເຫລົ່ານີ້ ບໍ່ສາມາດແກ້ໄຂບັນຫາຄວາມຂັດຂ້ອງທາງສັງຄົມໄດ້. ໃນຂັ້ນທຳອິດ ຂະບວນການຕໍ່ຕ້ານມີສູນກາງຢູ່ທີ່ສະຫະພັນນັກສຶກສາ ມະຫາວິທະຍາໄລຢ່າງກຸ້ງ ແລະໄດ້ຮັບອິດທິພົນຈາກແນວຄຶດຂອງຂະບວນການ ຊິນນ໌ແຟນ (Sinn Fein) ພວກສາທາລະນະລັດໄອຣິຊ ແນວຄຶດຂອງ ໄນຊ໌ດ໌ (Nietzshe) ແລະຕໍ່ມາ ແນວຄຶດແບບກຳມະກອນອັງກິດ ແລະແນວຄຶດມາກຊ໌ດສ໌ ໄດ້ກໍ່ຕົວຂຶ້ນ ຢ່າງ ເປັນທາງການ ໃນຊຸມສິບປີຫລັງ ເມື່ອຄົນຮຸ່ນຫນຸ່ມກຸ່ມນຶ່ງຍຶດອຳນາດກວດກາຢູ່ໃນສະມາຄົມ ໂດບາມາ ອາຊີ ອາໂຢເນ ໄດ້ (Dobama Asi ayone) ໄດ້ ສະມາຄົມນີ້ຕັ້ງຂຶ້ນໃນປີ 1932 ຫລັງຈາກມີ ຈະລາຈົນ ຕໍ່ຕ້ານອິນເດຽ ແລະພາຍຫລັງການລຸກຮື ຂອງ ຫັສຍາ ຊັນ, ສະມາຄົມ ໂດບາມາ ອາຊີ ອາໂຢເນ ໄດ້ກາຍເປັນສູນຮວມຂອງຄົນຫນຸ່ມຊາດນິຍົມຮຸນແຮງ. ພວກຫົວໜ້າພາກັນເອີ້ນຕົນເອງວ່າ ຖະຄິນ (thakin) ຫລື "ນາຍ" ຫມາຍຄວາມວ່າພວກເຂົາ ເປັນຜູ້ມີສິດໂດຍຊອບທຳ ໃນການປົກຄອງພະມ້າ ບໍ່ແມ່ນ "ນາຍອັງກິດ". ກ່ອນຍຶດເອົາສະມາຄົມ ໂດມາບາ ອາຊີ ອາໂຢເນ, ພວກຫົວໜ້າຮຸ່ນຫນຸ່ມຈຳນວນຫລາຍຄົນ ກໍໄດ້ມີປະສົບການທາງການເມືອງອັນທຳອິດຂອງພວກເຂົາຄື ການປະທ້ວງໃຫຍ່ທົ່ວປະເທດ ໃນປີ 1936 ເພື່ອຄັດຄ້ານ ລັດຖະດຳລັດ ກ່ຽວກັບມະຫາວິທະຍາໄລ. ການປະທ້ວງຄັ້ງນັ້ນ ນຳພາໂດຍ ອອງຊານ (Aung San) ທີ່ເປັນນັກສຶກສາຢູ່ໃນຂະນະນັ້ນ ແລະນູ (Nu) ກັບອີກຫລາຍຄົນທີ່ພວມໂດ່ງດັງ ໃນວົງການລັດຖະບານ ແລະການເມືອງໃນຊຸມປີ 1940 ຫາ 1950, ນັ້ນເປັນການສະແດງທ່າທີບໍ່ໄວ້ເນື້ອເຊື່ອໃຈ ຕໍ່ອຳນາດການປົກຄອງຝ່າຍສຶກສາ ແລະລະບົບການສຶກສາອານານິຄົມ ແລະຫວນຄືນໄປເອົາແບບການປະທ້ວງ ຂອງນັກສຶກສາ ປີ 1921. ການປະທ້ວງຄັ້ງທີສອງ ຂະຫຍາຍກວ້າງທົ່ວປະເທດຄືກັນ ໄດ້ຖືກລະງັບໄປ ເມື່ອທາງມະຫາວິທະຍາໄລ ແລະສະພານິຕິບັນຍັດໄດ້ຕົກລົງພິຈາລະນາຂໍ້ຮຽກຮ້ອງຂອງນັກສຶກສາ ເຊິ່ງໃນທີ່ສຸດ ກໍໄດ້ນຳເອົາຄວາມເອກະລາດທາງການເມືອງມາໃຫ້ມະຫາວິທະຍາໄລຫລາຍຂຶ້ນ. ພາຍຫລັງອອກຈາກ ມະຫາວິທະຍາໄລແລ້ວ ພວກນັກຊາດນິຍົມຮຸນຫນຸ່ມ ກໍໄດ້ສຸມກຳລັງໃສ່ການຂຽນກ່ຽວ ກັບກົນລະຍຸດແບບ ຊ້າຍຈັດ ແລະວິທີການຈັດຕັ້ງການປະທ້ວງຂອງຊາວນາກັບສະຫະພັນແຮງງານ ພາຍໃຕ້ເງື່ອນໄຂ ປັດຈຸບັນ. ພວກຜູ້ນຳພັກການເມືອງໃນສະພານິຕິບັນຍັດ ຕ່າງກໍສະແຫວງຫາການສະຫນັບສະຫນຸນ ຈາກພວກນັກຊາດນິຍົມຮຸນຫນຸ່ມພວກນີ້.

ພັກການເມືອງ ທີ່ເຂົ້າຊ່ວງເສັງ ແລະໄດ້ໄຊຊະນະໃນການເລືອກຕັ້ງ ປີ 1936 ຍັງຄົງແຕກແຍກກັນ ເປັນຫລາຍຝ່າຍຢູ່ ຕໍ່ກັບບັນຫາການຮ່ວມມືກັບອັງກິດ ແລະລະດັບຂອງການປະຕິຮູບ ທີ່ຕ້ອງຮຽກຮ້ອງເອົາ ເຊິ່ງມັນໄດ້ຕິດຕາມຊີວິດຂອງພັກ ມາຕັ້ງແຕ່ຕົ້ນຊຸມປີ 1920. ພັກພັນທະມິດ 5 ພັກ ນຳໂດຍ ອູ ບາ ເປ (U Ba Pe) ທີ່ມີໄຊໃນການເລືອກຕັ້ງ ໄດ້ບ່ອນນັ່ງຈຳນວນຫລາຍໃນສະພານິຕິບັນຍັດ ແຕ່ບໍ່ສາ

ມາດຈັດຕັ້ງຄະນະລັດຖະມຸນຕີໄດ້ ແລະເພາະເຫດນັ້ນ ໃນປີ 1937 ທ່ານ ດຣ. ບາໂມ (Ba Maw) ຜູ້ຊ່ອຍປ້ອງກັນ ທັສຍາ ຊັນ ເມື່ອເວລາຖືກໄຕ່ສວນຄວາມຜິດຖານທໍລະຍົດຕໍ່ຊາດ ໄດ້ນຳພາການໂຄສະນາຕໍ່ຕ້ານຜູ້ນິຍົມການແບ່ງແຍກ ໃນປີ 1932 ແລະໄດ້ເປັນລັດຖະມຸນສຶກສາໃນລະຫວ່າງການປະທ້ວງ ຂອງນັກສຶກສາ ປີ 1932 ກໍໄດ້ຈັດຕັ້ງລັດຖະບານປະສົມຂຶ້ນຈາກພັກການເມືອງນ້ອຍໆ, ຫົວໜ້າຊົນຊາດຊົນເຜົ່າ ແລະ ພວກທີ່ລາອອກຈາກພັກການເມືອງອື່ນ ເພື່ອນຳພາລັດຖະບານຊຸດທຳອິດ ຂອງພະມ້າ ທີ່ແຍກຕົວແລ້ວ.

ຕໍ່ມາອີກ 5 ປີ ຈົນ ເຖິງເວລາຍີ່ປຸ່ນບຸກຮຸກເຂົ້າປະເທດ ຈຶ່ງແມ່ນວາລະສ້ຽງສຸດ ແຫ່ງລະບອບການປົກຄອງອານານິຄົມອັງກິດ, ວຸຽກງານການເມືອງໃນພະມ້າ ຖືກຄອບງຳດ້ວຍການຊ່ວງເສັ້ງຍາດແຍ່ງຕຳແໜ່ງ ແລະອຳນາດລະຫວ່າງນັກການເມືອງມືອາຊີບ ເຊັ່ນ ດຣ. ບາ ໂມ, ອູ ບາ ເປ ແລະ ຜູ້ອື່ນໆ ໂດຍສະເພາະພວກຄົນຫນຸ່ມ ແລະ ອູ ສາວ (U Saw) ຜູ້ສະຫລາດຫລັກແຫລມທາງການເມືອງ. ໃນລະຫວ່າງນັ້ນ ໄດ້ມີການຕັ້ງຄະນະລັດຖະມຸນຕີ 3 ຊຸດ ແລະ ຕໍ່ມາ ລະບຽບກົດໝາຍລັດຖະທຳມະນູນໃຫມ່ເລີ່ມກໍ່ຕົວເປັນຮູບຊົ່ງຂຶ້ນ. ຜູ້ວ່າຣາຊະການ ເຖິງແມ່ນວ່າຈະສະຫງວນອຳນາດໃນການຍັບຍັ້ງ ຂັ້ນສຸດທ້າຍຂອງຕົນໄວ້ ກໍອະນຸຍາດໃຫ້ລັດຖະມຸນຕີ ຜ່ານເລືອກຕັ້ງ ຕັດສິນໃຈວ່າ ຄວນຈະເຮັດແນວໃດ ເພື່ອຫລຸດຜ່ອນຄວາມທຸກຍາກທາງເສດຖະກິດ ແລະສັງຄົມຂອງປະເທດ. ບັນຫາຂອງຊາວນາຮວມ ທັງການ ປະຕິຮູບທີ່ດິນ, ການເກັບພາສີ, ການປະຕິຮູບມະຫາວິທະຍາໄລ ແລະການໃຫ້ສິນເຊື່ອເພື່ອ ການກະສິກຳ ຮວມທັງການກວດຄົນເຂົ້າເມືອງ ແລະ "ການສຶກສາອົບຮົມແນວຄິດຮັກຊາດ" ຂອງລັດຖະບານ ແລະຕຳແໜ່ງທາງການຄ້າທັງໝົດ ເປັນຫົວຂໍ້ທີ່ຕ້ອງສຶກສາ ແລະອອກກົດໝາຍດ້ວຍຄວາມລະມັດລະວັງ. ຢ່າງໃດກໍດີ, ມີການປ່ຽນແປງດ້ານເລັກດ້ານນ້ອຍເທົ່ານັ້ນ ກ່ອນການບຸກຮຸກເຂົ້າມາຂອງຍີ່ປຸ່ນ ແລະການເມືອງຍຸກອານານິຄົມອັງກິດ ເຕັມຮູບແບບ ກໍຍັງສະແດງອອກໃຫ້ເຫັນຢູ່.

# ບົດທີ 27 ປະເທດ ອິນໂດເນເຊຍ

ວັນທີ 12 ມັງກອນ 1900 ເມື່ອຮຸ່ງອະລຸນຂອງສະຕະວັດໃຫມ່ກຳລັງສ່ອງຟ້າ ຍິງສາວຊະວາຄົນ ນຶ່ງ ຊື່ວ່າ ຣະເດັ່ນ ອັດເຈັ ງ ກາຣຕິນີ (Raden Adjeng Kartitni) ຂຶ້ນຕົ້ນຈົດໝາຍເຖິງ ເພື່ອນຄົນນຶ່ງ ເປັນພາສາ ດັດຊ໌ ວ່າ: " ໂອ ! ຈັ່ງແມ່ນຄັກແທ້ໆ ພຽງແຕ່ໄດ້ຢູ່ໃນສະໄໝນີ້ ລະຍະຂ້າມຜ່ານຈາກຍຸກເກົ່າ ຫາຍຸກໃຫມ່! "ຈຸດສະແດງຄວາມອັດສະຈັນເປັນຂອງ ນາງກາຣຕິນີເອງ, ແຕ່ວິໄສທັດນັ້ນ ເປັນຄວາມຈິງ ໃນຍຸກສະໄໝນຂອງນາງ, ຍຸກໃຫມ່ກຳລັງໄຂຂຶ້ນໃນເຂດໝູ່ເກາະດອນເນເທີແລນອິນດີສ. ໃນຊຸມປີຕົ້ນໆ ຂອງສະຕະວັດ ສັງຄົມທັງຫລາຍຂອງໝູ່ເກາະດອນ ນັບທັງດອນຊະວາ ໄດ້ເຕົ້າໂຮມເຂົ້າກັນເປັນສັງ ຄົມອິນດີສ ໃຫມ່ທີ່ກວ້າງຂວາງກວ່າເກົ່າ. ເສດຖະກິດສິ່ງອອກເຕີບໃຫຍ່ໄວ ເງິນລົງທຶນໃຫມ່ພວມຫລັ່ງ ໄຫລເຂົ້າມາ ເມືອງທີ່ມີຖະໜົນເປັນຕົມດິນ ກຳລັງກາຍເປັນເມືອງສະໄໝໃຫມ່.ໂດຍມີພະລັງແຂງແຮງ ດ້ວຍຈະລິຍະທຳ ອານານິຄົມ ທີ່ປະກາດອອກໃຊ້ໃຫມ່ໆ ຄື " ນະໂຍບາຍ ວ່າດ້ວຍຈັນຍາທຳ" ລັດຖະບານ ໄດ້ເປັນເຈົ້າເຮືອນຮັບຕ້ອນໂຄງການພັດທະນາໃຫມ່ໆ ເຂົ້າໃນຊີວິດຂອງຊາວບ້ານ. ເວລານັ້ນ ຄວາມໝາຍ ແບບໃຫມ່ຂອງການປ່ຽນແປງແລະຈຸດມຸ່ງໝາຍ ພວມລ່ອງລອຍເຕັມໄປໝົດ.

ກາຣ໌ຕິນີ ຮູ້ສຶກດີໃນເລື່ອງທັງໝົດນີ້. ແຕ່ສຳລັບນາງ ກ່ອນອື່ນໝົດ ຍຸກໃຫມ່ແມ່ນຢູ່ໃນຈິດໃຈ ຂອງນາງເອງ, ນາງພໍພຽງແຕ່ຕ້ອງການດວງຕາໃຫມ່ ເພື່ອເບິ່ງສັງຄົມ ເຊິ່ງບັດນີ້ກຳລັງປ່ຽນແປງຮູບ ໂສມໄປ ຢ່າງວ່ອງໄວອ້ອມໆໂຕນາງ. ເລື່ອງລາວຊີວິດຂອງນາງ ຕາມທີ່ຖືກບັນທຶກໄວ້ໃນຈົດໝາຍຕິດຕໍ່ ທີ່ພິມອອກຈຳໜ່າຍແລ້ວນັ້ນ ແມ່ນການເດີນທາງເພື່ອຄົ້ນຫາຕົນເອງ. ຄຸນນະພາບພິເສດຂອງຈົດໝາຍ ເຫລ່ານັ້ນ ບໍ່ໄດ້ມາຈາກຕອນຊີວິດໄວເດັກໃນເຄຫະສະຖານ ຂອງທ່ານບິດາເຊິ່ງເປັນຜູ້ສຳເລັດລາຊະການ ປະຈຳ ຈາປາຣາ (Japara) ແຕ່ຫາກມາຈາກການສຶກສາ ຂອງນາງໃນໂຮງຮຽນປະຖົມເອີຣົບ ປະຈຳ ທ້ອງຖິ່ນ. ຢູ່ໂຮງຮຽນນັ້ນ ນາງໄດ້ຮຽນພາສາດັດຊ໌ ຈຶ່ງສາມາດເຂົ້າເຖິງທຸກສິ່ງທຸກຢ່າງ ເທົ່າທີ່ຄວາມ ນຶກຄຶດແບບສະໄໝໃຫມ່ຂອງເອີຣົບ ສາມາດໃຫ້ໄດ້. ມັນໄດ້ເຮັດໃຫ້ການເດີນທາງຂອງນາງລຳບາກ ແລະ ເຕັມໄປດ້ວຍຄວາມເຈັບປວດ ຍ້ອນນາງຍັງຍຶດໝັ້ນຢ່າງເລິກເຊິ່ງຢູ່ກັບມໍລະດົກຊະວາ. ແຕ່ມັນກໍເຮັດໃຫ້ ນາງສາມາດເຫັນໝູ່ເກາະດອນອິນດີສໃຫມ່ ທີ່ຢູ່ອ້ອມຮອບຕົວນາງ ແລະຢ່າງໜ້ອຍກໍເພື່ອເລີ່ມຕົ້ນວຽກ ງານໃນການກຳນົດສະຖານະ ສຳລັບຕົນເອງໃນທີ່ແຫ່ງນັ້ນ.

ສິ່ງທີ່ເກີດຂຶ້ນກັບ ນາງກາຣ໌ຕິນີ ກໍໄດ້ເກີດຂຶ້ນກັບຜູ້ອື່ນໆຫລາຍຜູ້ຫລາຍຄົນໃນຮູບແບບ ທີ່ຕ່າງ ກັນໄປ ຢູ່ໃນໝູ່ເກາະດອນອິນດີສ ເມື່ອຕົ້ນສະຕະວັດທີຊາວ, ບໍ່ພຽງແຕ່ກັບຊາວຊະວາ ຊູດານ ມາກັສສາຣ໌ ແລະມິນນັງກາໂບ ເທົ່ານັ້ນ ແຕ່ຫາກເກີດແມ່ນແຕ່ກັບພວກລູກຊອດຝຣັ່ງ-ອາຊີ (ເອີຣາຊຽນ:ເອີຣົບ-ອາຊີ) ຄົນຈີນ ແລະພວກດັດຊ໌ ເອງ. ປະຫວັດສາດການເມືອງຂອງເຂດນອກສຸດແຫ່ງຍຸກ ເປັນເລື່ອງລາວ ກ່ຽວກັບວ່າ ໃນຍຸກສູງສຸດຂອງການປົກຄອງອານານິຄົມຂອງດັດຊ໌ນັ້ນ ແມ່ນດ້ວຍວິທີການອັນໃດ ເຮັດ ໃຫ້ຄວາມຄຶດລິເລີ່ມສ້ຽງຜ່ານໄປສູ່ຜູ້ຢູ່ໃຕ້ການປົກຄອງ ເຊິ່ງຂະນະທີ່ພວມພັດທະນາແນວຄຶດຊາດນິຍົມຢູ່ນັ້ນ ໄດ້ທ້າທາຍກັບການປົກຄອງອັນນັ້ນ ແລະກະກຽມວາລະສຸດທ້າຍໃຫ້ມັນ. ປະຫວັດສາດການເມືອງຢູ່ພາກ ໃນຂອງດິນແດນເມື່ອຊຸມປີເຫລ່ານັ້ນ ປະກອບດ້ວຍການປ່ຽນແປງຮູບໂສມຕົນເອງຫລາຍຊຸດ ໂດຍທຸກຜູ້ ທຸກຄົນທີ່ເຂົ້າສະແດງ ບົດບາດຢູ່ໃນປະຫວັດສາດພາກນອກດິນແດນ. ໃນດອນຊະວາບູຮານ ແລະໃນເກາະ ດອນຕ່າງໆ ມີສັງຄົມ ແຕກຕ່າງຫລາກຫລາຍ, ທັງຄົນພື້ນເມືອງແລະຊາວອົບພະຍົບ ດຳລົງຊີວິດຄຽງ ບ່າຄຽງໄລກັນ ທັງທີ່ມີສິ່ງກ່ຽວຂ້ອງກັນເລັກໆນ້ອຍໆ ຫລື ອາດບໍ່ມີ ຫລື ໃນບ່ອນທີ່ພວກເຂົາມີແນວຄຶດ ດູດກັນ ແລະກັນ, ຕ່າງກໍປັບ ຕົວເຂົ້າຫາວັດທະນະທຳຂອງກັນແລະກັນຢ່າງຈິງໃຈແລະງ່າຍໆ. ລຸນຫລັງປີ 1900 ຂອບຣັດແຫ່ງສັງຄົມ ອິນດີສສະໄໝໃຫມ່ ໄດ້ບີບຮັດໃຫ້ພວກເຂົາເຂົ້າໃກ້ຊິດກັນຫລາຍກວ່າເກົ່າ ລະ ລາຍຄວາມຊິນເຄີຍ ແບບເກົ່າແລະທ້າທາຍກັບວັດທະນະທຳ ທີ່ກໍ່ເກີດແລ້ວຂອງແຕ່ລະກຸ່ມດ່ຽວໆ. ທັງ

ຫມົດຕົກຢູ່ພາຍໃຕ້ຄວາມບີບເຕັ້ງຮຸນແຮງ ເພື່ອກຳນົດຄືນໃຫມ່ ເອກະລັກທາງວັດທະນະທຳຂອງພວກເຂົາ ແລະສະແຫວງຫາສະຖານະສຳລັບຕົນເອງ ຢູ່ໃນລະບຽບສັງຄົມໃຫມ່ທີ່ພວມພົ້ນເດັ່ນຂຶ້ນ. ດັ່ງນັ້ນ ກ່ອນເລື່ອງການເມືອງ, ການສຶກສາ ໄດ້ເຂົ້າມາກ່ອນ, ທັງສອງຢ່າງ ນອນຢູ່ຄວາມຫມາຍແບບແຄບໆ ຄືການໄດ້ເຂົ້າໂຮງຮຽນ ແລະຄວາມຫມາຍ ທີ່ ເປັນພື້ນຖານກວ່າ ກໍແມ່ນການຄົ້ນພົບຕົນເອງ.

ໃນບັນດາກຸ່ມສັງຄົມທັງຫມົດ ຢູ່ໃນດອນອິນດີສ ເນເທີແລນ ນັ້ນ ແມ່ນພວກໂຕະຕົກດັດຊ໌(ທີ່ເກີດໃນຕ່າງແດນ, totok) ທີ່ພົບວ່າ ການປ່ຽນແປງຮູບໂສມຂອງພວກເຂົາງ່າຍດາຍທີ່ສຸດ ເຖິງແມ່ນວ່າມັນໄດ້ຂະມຳເລິກໄປແລ້ວ ແລະຜົນສະທ້ອນກໍຕ້ອງຮ້າຍແຮງແດ່ກໍຕາມ. ຄວາມສະດວກສະບາຍຂອງຂະບວນນີ້ ກໍແມ່ນຍ້ອນການອົບພະຍົບຢ່າງຫລວງຫລາຍຈາກປະເທດໂຮນລັງເທົ່ານັ້ນ ເມື່ອລັດຖະບານ ແລະໂດຍສະເພາະ ນັກທຸລະກິດໄດ້ຂະຫຍາຍຕົວຢ່າງໄວວານັ້ນ. ພວກແຕຣກເກີສ໌ (Trekkers: ຄົນດັດຊ໌ ທີ່ມາເຮັດວຽກປະຈຳ) ອອກມາຢູ່ດອນອິນດີສ ຕາມທຳມະດາແລ້ວ ເມື່ອຖືກສົ່ງມາ ເຮັດວຽກສະເພາະໃດນຶ່ງ ຕາມກຳນົດເວລາແນ່ນອນ ພວກເຂົາມາກັບຄອບຄົວລູກເມຽຄົນດັດຊ໌, ກັບເມືອຢາມບ້ານໃນຍາມພັກ ເປັນລະຍະແລະວາງແຜນອອກບຳນານຢູ່ທີ່ນັ້ນ. ກ່ອນທີ່ພວກເຂົາອອກມາ ເອກະລັກທາງວັດທະນະທຳຂອງພວກເຂົາມີຮາກຖານຕົວຕົນຄັກແນ່ແລ້ວ ແລະເມື່ອພວກເຂົາມີຈຳນວນຫລາຍຂຶ້ນ ຈຶ່ງບໍ່ມີເຫດຜົນຈຳເປັນໃດໆ ທີ່ຈະຕ້ອງປັບຕົວເຂົ້າກັບວັດທະນະທຳທ້ອງຖິ່ນ. ດັ່ງນີ້ ຄົນພວກນີ້ ຈຶ່ງແຕກຕ່າງຫລາຍກັບ ຄົນຮຸ່ນເກົ່າທີ່ເປັນກຸ່ມນ້ອຍກວ່າຫລາຍ ຄື ພວກດັດຊ໌ ບລິຊເວີ (blijvers) ຫລື ຜູ້ຢູ່ກັບທີ່, ເຊິ່ງຄຶດວ່າ ດອນອິນດີສ ແມ່ນບ້ານເຮືອນຂອງພວກເຂົາ. ກະແສຫລັ່ງເຂົ້າ ຢ່າງເຂັ້ມຂຸ້ນ ລຶບກືນ ພວກ ບລິຊເວີ ແລະພາຍຫລັງ 1900 ແມ່ນພວກດັດຊ໌ແຕຣກເກີ ທີ່ໄດ້ເປັນຜູ້ກຳນົດຮູບແບບການເປັນຢູ່ ຂອງຊຸມຊົນໂຕະຕົກດັດຊ໌. ຢູ່ໃນຮ້ານກາເຟ ຮ້ານຄ້າຂາຍ ແລະເຮືອນພັກຕາກອາກາດທີ່ແສນສະດວກໃນຄຸ້ມຂອງຄົນເອີຣົບ ກາງເມືອງໃຫມ່ໆ ລ້ອມແຕ່ ແມ່ນບ່ອນທີ່ຊີວິດຂອງຊາວດັດຊ໌ ໄດ້ກໍ່ຕົວຂຶ້ນເອົາເອງ.

ໃນຂະນະທີ່ຊາວດັດຊ໌ ໂຕະຕົກດັດຊ໌ (ດັດຊ໌ຕ່າງດ້າວ) ມີຊີວິດຢູ່ແບບເປັນສ່ວນຕົວ ໃນຊຸມຊົນປິດຕ່າງຫາກຢ່າງນີ້ ກໍໄດ້ມີການຂະຫຍາຍຕົວຂະຫນານຄູ່ອີກ ກໍ່ເກີດຂຶ້ນຢູ່ໃນວົງການລັດຖະບານ ທີ່ດຳເນີນງານ ໂດຍພວກດັດຊ໌ໂຕະຕົກ (ດັດຊ໌ຕ່າງດ້າວ). ການປ່ຽນແປງເລີ່ມຕົ້ນຂຶ້ນໃນສະໄຫມ "ນະໂຍບາຍກ່ຽວກັບຈະລິຍະທຳ" ອັນເປັນຊື່ເອີ້ນລ້ໍພວກມີທັດສະນະທ່າທີໃຫມ່ ຕໍ່ການປົກຄອງອານານິຄົມ ທີ່ກາຍມາເປັນຈຸດເດັ່ນ ໃນບາດລ້ຽວແຫ່ງສະຕະວັດໃຫມ່. ພວກຫົວໜ້າຂະບວນການຈະລິຍະທຳ ແມ່ນພວກຜູ້ຊາຍ ທີ່ມີຈິດໃຈສູງ ແຕ່ເດືອດຮ້ອນຂຶ້ນຍ້ອນການລາຍງານເລື່ອງການຕົກຕ່ຳທາງສະຫວັດດິການ ຂອງຊາວຊະວາ ແລະໄດ້ຕັດສິນໃຈທີ່ຈະສ້າງຊົນຊັ້ນຄົນພື້ນເມືອງ ຜູ້ມີການສຶກສາແບບສະໄຫມໃຫມ່ຂຶ້ນມາໃຫມ່ ເພື່ອໃຫ້ມີສ່ວນຮ່ວມໃນການປົກຄອງກັບພວກເຂົາເອງ. ເພື່ອບັນລຸຜົນນີ້ ພວກເຂົາໄດ້ພັດທະນາລະບົບພື້ນຖານຂອງໂຮງຮຽນພາສາດັດຊ໌ ແລະໄດ້ວາງແຜນວຽກສະຫວັດດິການຊຸດນຶ່ງອອກ ອັນຍູ້ດັນໃຫ້ລັດຖະບານ ເຂົ້າມາກ່ຽວຂ້ອງໂດຍກົງ ກັບກິດຈະການຂອງຜູ້ຄົນໃຕ້ການປົກຄອງຂອງຕົນຫລາຍຂຶ້ນ.

ເຖິງແນວໃດກໍດີ ການເຂົ້າມີສ່ວນຮ່ວມຢ່າງໃກ້ຊິດຫລາຍກວ່າເກົ່າ ກໍໄດ້ພາໄປສູ່ການແຕກແຍກຮ້າຍແຮງກວ່າເກົ່າ ລະຫວ່າງຜູ້ປົກຄອງກັບຜູ້ຖືກປົກຄອງ. ນະໂຍບາຍກ່ຽວກັບຈະລິຍະທຳ ເປັນຄວາມຄຶດກ່ຽວກັບບົດບາດຂອງລັດຖະບານ ແບບເອີຣົບອ້ອຍຕ້ອຍ ແລະໂດຍບໍ່ມີຮາກເຫງົ້າໃດໆຕາມປະເພນີທາງການເມືອງຂອງທ້ອງຖິ່ນເລີຍ. ແຜນວຽກທາງສະຫວັດດິການແບບເລີດລອຍນັ້ນ ຈຳເປັນຕ້ອງຖືກບໍລິຫານແບບອາດຍາສິດອ້ອຍຕ້ອຍ ໂດຍຜ່ານກົມກອງແລະກົດລະບຽບຂອງລັດຖະບານ ຫລາຍກວ່າແບບຂອງ ປຣິຍາຢີ ຂອງດັດຊ໌ ຮຸ່ນເກົ່າ ທີ່ເຮັດໄວ້ຢູ່ໃນຊະວາ. ຍິ່ງກວ່າສິ່ງໃດຫມົດ ນະໂຍບາຍວ່າດ້ວຍ ຈະລິຍະທຳຍັງເອື່ອຍອີງໃສ່ຄວາມອວດອົ່ງທະນົງຕົວທາງວັດທະນະທຳຂອງພວກໂຕະຕົກດັດຊ໌(ຕ່າງດ້າວ) ອີກ. "ເຖິງວ່າຄວາມມຸ່ງຫມາຍທີ່ພວກເຮົາຕິດຕາມຢູ່ຈະຍິ່ງໃຫຍ່ພໍພຽງໃດກໍຕາມ ! " ໃຜຜູ້ນຶ່ງຂຽນໄວ້: "ມັນກໍເປັນການກໍ່ຮູບຮ່າງສ້າງຕົນ ຂອງຫນ່ວຍເອກະພົບນຶ່ງທາງສັງຄົມ ຢູ່ທີ່ນັ້ນ... ເຊິ່ງກໍຕົກເປັນຫນີ້ບຸນຄຸນປະເທດເນເທີແລນ ໃນເລື່ອງຄວາມຮັ່ງມີ ແລະວັດທະນະທຳທີ່ສູງສົ່ງກວ່າ ແລະຂໍຮັບຮູ້ຢ່າງສຳນຶກໃນບຸນ

ຄຸນໃນຄວາມເປັນຈິງອັນນີ້", ເຊັ່ນດຽວກັບຊຸມຊົນຂອງພວກດັດຊ໌ຕ່າງດ້າວ(ໂຕະຕົກ)ເຊິ່ງເປັນຮາກເຫງົ້າ ຂອງຕົນ ລັດຖະບານ ໂຕະຕົກດັດຊ໌ (ຕ່າງດ້າວ) ໄດ້ແຍກຕົວອອກຫ່າງຈາກຜູ້ຢູ່ໃຕ້ການປົກຄອງ ຂອງຕົນ ຕ່າງຫາກ ແລະກາຍເປັນສະໂມສອນສ່ວນຕົວຂອງຄົນຕ່າງຊາດ ຕັ້ງຕົວຢູ່ເທິງຈອມສູງສຸດຂອງກົນໄກລະ ບົບລາຊະການ.

ພວກດັດຊ໌ ໂຕະຕົກ ເຖິງວ່າເດັ່ນດັງ ແຕ່ກໍເປັນພຽງຄົນກຸ່ມນ້ອຍເທົ່ານັ້ນໃນຫມູ່ຊັ້ນຄົນທີ່ຈັດວ່າ ເປັນຊາວເອີຣົບ ຕາມກົດຫມາຍອິນດີສ. ສ່ວນຫລາຍເປັນພວກລູກຊອດ ເກີດໃນທ້ອງຖິ່ນ(ເປຣານາກັນ) ຫລື ຢູເຣຊຽນ(ຊອດຝຣັ່ງອາຊີ) ເມື່ອສະຕະວັດທີ19. ພວກຢູເຣຊຽນທັງຫມົດ ມີວັດທະນະທຳປະສົມຂອງ ອິນດີສ ແຕ່ພວກເຂົາບໍ່ໄດ້ສ້າງຊຸມຊົນສັງຄົມທີ່ແຕກຕ່າງກັນ ແລະຫນຽວແຫນ້ນ ຄືກັບຊາວຈີນ ເປນາຣາກັນ ເຣັດໄວ້. ຜູ້ທຸກຍາກສຸດຄືພວກຜູ້ຊາຍ ທີ່ຂຶ້ນທະບຽນກອງທັບຂອງລາຊະອານາຈັກເນເທີແລນ ມີຄວາມເປັນ ຢູ່ຄືກັບຄົນທຸກຍາກ ຊາວອຳບອນ ແລະຊະວາ ພັກອາໄສຢູ່ໃນໂຮງທະຫານແບບອະນາຖາ ແລະຄ້າຍແນວ ຫລັງຂອງບັດຕາເວຽ. ຜູ້ຊ່ອຍວຽກເຈົ້າຂອງສວນ, ລູກຈ້າງຂັ້ນນ້ອຍ ແລະເມຽ ກັບເມຽນ້ອຍ ຂອງພະນັກ ງານຊາວດັດຊ໌ ເວົ້າລົມກັນເປັນພາສາດັດຊ໌ ຫລາຍກວ່າ ແລະດຳລົງຊີວິດແບບຊົນຊັ້ນຂຸນນາງນ້ອຍ. ຢູ່ ຈອມສູງສຸດ ແມ່ນພວກລູກຊອດຢູ່ສັບປົນກັບພວກ ດັດຊ໌ບລີຊ໌ເວີ ມີຕຳແຫນ່ງຫນ້າວຽກສູງ ໃນລັດຖະບານ, ເວົ້າລົມພາສາດັດຊ໌ເປັນສ່ວນຫລາຍ ແລະດຳລົງຊີວິດແບບອິນດີສ ຢ່າງຟຸ່ມເຟືອຍທີ່ສຸດ. ຢ່າງໃດກໍດີ ທັງ ຫມົດກໍມີຄວາມສຸກດີກັບກຽດຕິຍົດ ທີ່ໄດ້ຊື່ວ່າເປັນຄົນເອີລົບ ແລະມີບົດບາດທາງສັງຄົມ ກັບຮູບແບບ ວັດທະນະທຳ ອັນຫມັ້ນຄົງຫນັກແຫນ້ນ.

ປະມານປີ 1900 ສະຖານະການເລີ່ມປ່ຽນໄປ. ຂະນະທີ່ພວກດັດຊ໌ບລີຊເວີ ຫລີກທາງໃຫ້ພວກດັດຊ໌ ໂຕະຕົກ(ຕ່າງດ້າວ) ນັ້ນ ແລະຂະນະທີ່ພວກດັດຊ໌ໂຕະຕົກ ເຊິ່ງຮວມກຸ່ມກັນ ເລີ່ມຖອນໂຕອອກໄປຢູ່ກັບຊຸມ ຊົນເອີຣົບທັງຫມົດ, ຄວາມຫມາຍທາງສັງຄົມແລະວັດທະນະທຳຂອງການເປັນຄົນເອີລົບເຄັ່ງຄັດຂຶ້ນ ບໍ່ວ່າ ກົດຫມາຍຈະວ່າແນວໃດກໍຕາມ. ນັບມື້ການຈຳແນກເຊື້ອຊາດຂອງຊຸມຊົນຜິວຂາວຍິ່ງທະວີຂຶ້ນ ເຖິງຂັ້ນ ເບິ່ງຄົນຜິວດຳເປັນສັນຍະລັກແຫ່ງຄວາມຫນ້າອັບອາຍ, ເຍາະເຍີ້ຍພວກດັດຊ໌ ທີ່ແຍກຕົວອອກມາ ແລະ ປະຕິເສດວັດທະນະທຳອິນດີສ ໂດຍຖືເປັນ" ພົ້ນເມືອງ/ບ້ານນອກ". ພວກລູກຊອດຝຣັ່ງອາຊີ(ຢູຣາຊຽນ) ພົບວ່າ ຈຳເປັນທີ່ສຸດທີ່ຕ້ອງກຳນົດເອກະລັກວັດທະນະທຳຂອງຕົນຄືນໃຫມ່. ບາງຄົນກໍໄດ້ຊຸມແຊກເຂົ້າໄປ ຢູ່ຮ່ວມກັບ ປະຊາຊົນຜູ້ທຸກຍາກສຸດ ແລະປາກພາສາມາເລ ຢູ່ຕາມຕົວເມືອງທັງຫລາຍ ໂດຍຢຸດປະພຶດ ຕົນເປັນຄົນດັດຊ໌ ທຸກຢ່າງ. ເຖິງຢ່າງໃດກໍດີ, ຄົນສ່ວນຫລາຍຍັງຄົງເລືອກນິຍາມຕົນເອງໃນດ້ານ ວັດທະ ນະທຳ ວ່າເປັນຄົນດັດຊ໌ ໂຕະຕົກ, ໄປໂຮງຮຽນປະຖົມເອີລົບ ແລະພະຍາຍາມຮັບການສຶກສາທີ່ໃຊ້ພາສາ ດັດຊ໌ ເທົ່າທີ່ພວກເຂົາສາມາດເຮັດໄດ້, ປະຖິ້ມຮູບແບບການດຳລົງຊີວິດແບບອິນດີສ ແລະປາກເວົ້າພາສາ ມາເລ ກໍແຕ່ກັບຄົນຮັບໃຊ້ເທົ່ານັ້ນ. ຂະບວນການນີ້ ສະແດງອອກເຖິງການແລ່ນນຳຫລັງໃນທາງສັງຄົມ ການເມືອງ ແລະທັງວັດທະນະທຳ ຂອງພວກດັດຊ໌ໂຕະຕົກ(ຕ່າງດ້າວ) ຜູ້ຖອຍຫລັງໄວ ເມື່ອຕົ້ນຊຸມສິບປີ ທຳອິດຂອງສະຕະວັດ. ຢ່າງໃດກໍດີ ໃນລະຍະເວລາສັ້ນໆ ພາຍຫລັງປີ 1912 ພວກລູກຊອດຝຣັ່ງອາຊີ ພວກນຶ່ງ ໄດ້ພະຍາຍາມໃຫ້ນິຍາມຕົນເອງແບບແຕກຕ່າງຈາກຫມູ່. ໃນປີນັ້ນ ອີ. ແອຟ. ອີ ດູເວສ ເດກເກີຣ໌ (E.F.E. Douves Dekker) ໄດ້ກໍ່ຕັ້ງພັກອິນດີສ ຂຶ້ນ, ເປັນຂະບວນການປະຕິວັດນຶ່ງເຊິ່ງເປັນທີ່ຮັບຮູ້ຢ່າງ ເປີດເຜີຍ ໂດຍມີຄຳຂວັນວ່າ "ອິນດີສ ສຳລັບຜູ້ຕັ້ງເຮືອນຢູ່ທັ້ນ" ເຖິງແມ່ນວ່າຜູ້ຮ່ວມກໍ່ຕັ້ງເປັນຄົນຊະວາ ແຕ່ສະມາຊິກຫລາຍຮ້ອຍ ກໍເປັນລູກຊອດຝຣັ່ງອາຊີ ຄືກັບ ດູເວສ ເດກເກີຣ໌ ເອງ. ໃນການຫັນມາຕໍ່ສູ້ກັບ ພວກດັດຊ໌ໂຕະຕົກ ນັ້ນ ພວກດູເວສ ເດກເກີຣ໌ ໄດ້ພະຍາຍາມສ້າງແນວຄຶດຊາດນິຍົມອິດດີສ ໂດຍສະເພາະ ເຊິ່ງຂະຫຍາຍຕົວອອກກວ້າງຂວາງພໍທີ່ຈະກວມລວມເອົາພວກລູກຊອດ ທີ່ມີການສຶກສາໃຫມ່ ແບບຊະວາ ແລະທີ່ເປັນປະຊາຊົນຄົນພົ້ນເມືອງ.

ກຸ່ມສັງຄົມບາງກຸ່ມ ທີ່ມີລັກສະນະຄ້າຍຄືກັນ ໄດ້ສືບຕໍ່ຄົງຕົວມາຢູ່ໃນການຈັດຕັ້ງທຳນອງດຽວກັນ ຢູ່ໃນ ຟິລິບປິນ ເມື່ອທ້າຍສະຕະວັດທີສິບເກົ້າ ແຕ່ກໍລົ້ມແຫລວຢູ່ໃນດອນອິນດີສ. ການປາບປາມແບບນຸ່ມ

ນວນຂອງລັດຖະບານ ເກືອບບໍ່ມີຄວາມຈຳເປັນເລີຍ, ຂະບວນການດຳເນີນໄປຢ່າງລຳບາກ ພາຍໃຕ້ຫລາຍ ຊຸ ຈົນເຖິງທ້າຍທົດສະວັດນັ້ນ ແລ້ວກໍຫລີ້ມສະຫລາຍໄປ. ໃນລະຍະແຫ່ງຄວາມອັດຕະຄັດປີ 1919 ນັ້ນ ຄວາມຄຶດເຫັນຂອງພວກລູກຊອດ ປ່ຽນໄປໃນທິດທາງອື່ນຢ່າງຈະແຈ້ງ, ໂດຍມີສັນຍະລັກ ຢູ່ບ່ອນຊື່ຂອງ ອົງການຕົ້ນຕໍ ຂອງພວກເຂົາຄື ສະຫະພາບອິນໂດເອີຣົບ ເຊິ່ງກໍ່ຕັ້ງຂຶ້ນໃນປີນັ້ນເອງ. ບັດນີ້ ພວກເຂົາໄດ້ ນິຍາມຕົນເອງວ່າ-ເປັນຄົນດັດຊ໌ຕ່າງຫມູ ແລະເປັນປະເພດມີຫນ້ອຍສຸດຂອງຄົນດັດຊ໌, ຜູກຕິດຢູ່ກັບກຸ່ມພວກ ໂຕະຕົກ ຕໍ່ໄປ-ແລະເຊັ່ນດຽວກັນກັບພວກດັດຊ໌ໂຕະຕົກ (ຕ່າງດ້າວ) ຂະເຈົ້າ ໄດ້ພາກັນຖອຍອອກໄປຢູ່ໃນ ຊຸມຊົນຂອງຕົນເອງ ເຊິ່ງໄດ້ແບ່ງເຂດຂັ້ນຢ່າງຈະແຈ້ງ.

ມີຄົນຈີນຫລາຍກວ່າຄົນດັດຊ໌ ຢູ່ໃນດອນອິນດີສ ແຕ່ກໍມີພຽງແຕ່ປະມານສອງແສນຫ້າຫມື່ນຄົນ (1%) ເທົ່ານັ້ນ ໃນປີ 1870 ແລະມີນຶ່ງລ້ານຄົນ ໃນປີ 1930 (2%). ຄືກັນກັບພວກດັດຊ໌ ຄົນຈີນກໍຖືກແບ່ງ ອອກເປັນພວກໂຕະຕົກ (ຕ່າງດ້າວ) ແລະເປຣານາກັນ (peranakan: ລູກຊອດກັບຄົນພື້ນເມືອງ) ແລະ ພັດທະນາການ ດ້ານປະຫວັດສາດ ຂອງອົງປະກອບທັງສອງນີ້ ໃນຕົ້ນສະຕະວັດທີ 20 ກໍເປັນໄປແບບ ຄຽງຄູ່ກັບຂອງເພື່ອນຊາວດັດຊ໌ ຂອງພວກເຂົາ. ແຕ່ການແບ່ງແຍກທາງສັງຄົມພາຍໃນຂອງພວກເຂົາ ມີຄວາມລະອຽດຊັບຊ້ອນຫລາຍກວ່າ, ເສັ້ນທາງແຫ່ງການປ່ຽນແປງທາງວັດທະນະທຳ ຍິບຍ່ອຍສຳລັບ ພວກເຂົາມີຫລວງຫລາຍ ແລະຍາວໄກກວ່າ. ຖານະອັນຕ່ຳຕ້ອຍກວ່າຂອງພວກເຂົາ ຢູ່ໃນສັງຄົມທີ່ຄົນ ຕ່າງດ້າວເປັນໃຫຍ່ ບໍ່ໄດ້ເອື້ອໃຫ້ເກີດຄວາມຈົງຮັກພັກດີ ທາງການເມືອງຕໍ່ທັງແຜ່ນດິນເກີດ ແລະຕໍ່ການ ປົກຄອງອານານິຄົມ ບໍ່ຄືພວກດັດຊ໌ໂຕະຕົກ ແລະພວກລູກຊອດ ຜັດມີໂອກາດຢ່າງງ່າຍດາຍ. ດັ່ງນັ້ນ ໃນ ທຸກໆກໍລະນີການປ່ຽນແປງຂອງຊາວຈີນ ເມື່ອຕົ້ນສະຕະວັດທີ 20 ຈຶ່ງເປັນເລື່ອງເລິກແລບ ສະຫລັບຊັບຊ້ອນ ກວ່າ ມີອັນຕະລາຍແລະຫນ້າຕື່ນເຕັ້ນກວ່າຂອງພວກດັດຊ໌.

ກ່ອນປີ 1900 ຊຸມຊົນຈີນ ທີ່ຕັ້ງຕົວຫມັ້ນແກ່ນດີແລ້ວເກືອບທັງຫມົດ ຢູ່ໃນຫມູ່ເກາະດອນອິນດີສ ເປັນພວກເປຣານາກັນ (ລູກຊອດກັບຄົນພື້ນເມືອງ) ເຊິ່ງກໍ່ຮ່າງສ້າງໂຕຂຶ້ນຈາກການແຕ່ງດອງ ລະຫວ່າງ ຊາວຈີນອົບພະຍົບ ກັບແມ່ຍິງຊາວພື້ນເມືອງ, ມີຄວາມຫມັ້ນຄົງແຂງແກ່ນຂຶ້ນຕື່ມ ດ້ວຍການສ້າງຄອບຄົວ ຂອງລູກຊອດຊາວພື້ນເມືອງທັງຫມົດ ແລະເດັ່ນດັງຂຶ້ນດ້ວຍການປັບປ່ຽນຕົນເອງເຂົ້າກັບສັງຄົມ ແລະວັດ ທະນະທຳພື້ນ ເມືອງ ໃນລະດັບຕ່າງໆ. ບັນດາສັງຄົມທີ່ໃຫຍ່ສຸດ ແລະສຳຄັນສຸດຂອງທັງຫມົດນັ້ນ ແມ່ນຊຸມ ຊົນລູກຊອດຄົນພື້ນຖານ (ເປເຣນາກັນ) ຂອງຊະວາ ທີ່ຖືກກົດຫມາຍອິນດີສ ບັງຄັບໃຫ້ອາໄສຢູ່ໃນເຂດ ກຳນົດພິເສດຂອງເມືອງ, ມີພວກຄອບຄົວຮັ່ງມີ ແລະສືບທອດກັນມາຕາມລຳດັບຊົນຊັ້ນຂອງນາຍທະຫານ ຍົດພັນຕີ ຮ້ອຍເອກ ຮ້ອຍໂທ ເປັນສ່ວນໃຫຍ່, ຈັດຕັ້ງກັນຂຶ້ນເປັນຄອບຄົວຕາມສາຍຍາດພີ່ນ້ອງ ທີ່ໃຫ້ຄວາມ ສຳຄັນແກ່ສາຍຊະວາ ຫລາຍກວ່າສາຍຈີນ, ແລະມີກົກເຄົ້າເຫງົ້າກໍເປັນຕົ້ນຕໍ ພຽງມາຈາກກຸ່ມຕະກູນ ພາສາອັນຫລາກຫລາຍ ຂອງພາກໃຕ້ຈີນພຽງພາສາດຽວເທົ່ານັ້ນ, ພວກຮົກກຽນ ແມ່ນພວກລູກຊອດ ຊະວາ ເປເຣນາກັນ (ເກີດໃນທ້ອງຖິ່ນ) ທີ່ໄດ້ສ້າງຊຸມຊົນທີ່ມີກຳນົດຂອບເຂດຈະແຈ້ງ. ໃນເວລາດຽວກັນ ພວກເຂົາກໍມີຖານະທີ່ຫມັ້ນຄົງແລະສຳຄັນ ຢູ່ໃນສັງຄົມອັນກ້ວາງຂວາງກວ່າ, ສຳລັບ ລູກຊອດເປເຣເນກັນ ພໍ່ຄ້າມືກາງກັບເຈົ້າຂອງຮ້ານຄ້າຍ່ອຍ ແມ່ນຈຳເປັນສຳລັບພວກຊາວນາ ແລະຄົນໃນເມືອງ ຂະນະທີ່ ພວກທະຫານ ນາຍພັນ ນາຍຮ້ອຍ ກໍແລ່ນນຳການຜູກຂາດຝິ່ນ ແລະພາສີກະສິກຳອື່ນໆ ສຳລັບລັດຖະ ບານ.

ໃນທົດສະວັດທຳອິດຂອງສະຕະວັດທີ 20 ຊຸມຊົນສຸກສະບາຍຫມັ້ນຄົງດີແລ້ວນີ້ ມັກໄດ້ປະເຊີນຫນ້າ ແບບກະທັນຫັນ ກັບຄວາມກົດດັນແລະໂອກາດໃຫມ່ໆ ທີ່ຫລຸຫລັ່ງເຂົ້າມາພ້ອມກັນ ຫລາຍຫລົບຫລາຍ ຕ່າວ ແລະສະມາຊິກຂອງຊຸມຊົນນັ້ນ ກໍເລີ່ມສະແຫວງຫາເອກະລັກທາງສັງຄົມ ແລະວັດທະນະທຳໃຫມ່ ທີ່ຍັງບໍ່ທັນຕົກລົງກັນໄດ້ ຈົນຮອດດຽວນີ້. ດ້ານນຶ່ງ ຄວາມກົດດັນມາຈາກການສະຖາປະນາຮູບແບບການ ດຳລົງຊີວິດຂອງຊາວເອີລົບສະໄຫມໃຫມ່ ແລະມາດຕະຖານໃຫມ່ ຂອງຖານະທາງສັງຄົມ ໂດຍພວກດັດຊ໌ ຕ່າງດ້າວຢູ່ໃນຕົວເມືອງ ບ່ອນທີ່ພວກລູກຊອດທ້ອງຖິ່ນດຳລົງຊີວິດຢູ່. ອີກດ້ານນຶ່ງ ຄວາມກົດດັນເກີດມາ

ຈາກເຫດການໃນ ກະໂຕປະເທດຈີນເອງ ເມື່ອຂະບວນການປະຕິວັດໃຫມ່ໄດ້ເຕົ້າໂຮມກຳລັງ ເຂັ້ມແຂງຂຶ້ນ ພາຍຫລັງປີ 1900 ການຟື້ນເດັ່ນຂຶ້ນຂອງລັດທິຊາດນິຍົມຈີນ ໄດ້ສະຫນອງຕົວຢ່າງອັນທີສອງ ມີພະລັງ ຫນ້າຕື່ນເຕັ້ນຈັບໃຈ ໃນການສ້າງເອກະລັກວັດທະນະທຳ ແລະການເມືອງ ເຊິ່ງຄືກັບ ພວກດັດຊ໌ຢ່າງນຶ່ງ, ຄືເຮັດໃຫ້ພວກ ເປເຣນາກັນ ຮູ້ສຶກອັບອາຍ ເມື່ອສິບປີກ່ອນ ທີ່ໄດ້ພໍໃຈນຳຮູບແບບ ການດຳລົງຊີວິດຂອງຕົນ.

ສຳລັບທຸກກຸ່ມຄົນ ໂອກາດທັງຫລາຍ ທຳອິດກໍແມ່ນການມີໂຮງຮຽນໃຫມ່. ໃນທ້າຍ ສະຕະວັດທີ 19 ພວກລູກຊອດເປເຣນາກັນຊະວາ ທີ່ໄປເຂົ້າໂຮງຮຽນເຜີຍແຜ່ຄຣິດສ໌ຕຽນ ມີຈຳນວນຫນ້ອຍດຽວ ແຕ່ແລ້ວກໍເລີ່ມຫລາຍຂຶ້ນໆ. ສ່ວນໃຫຍ່ແລ້ວ ກໍແມ່ນພວກລູກຊອດເປເຣນາກັນ ທີ່ໄດ້ຮັບການສຶກສາຈາກ ໂຮງຮຽນເຜີຍແຜ່ສາສະນາ ນີ້ເອງ ທີ່ກໍ່ຕັ້ງສະມາຄົມຊາວຈີນໃຫມ່ ເປັນແຫ່ງທຳອິດ ຄື ຈົ໋ງ ຮົວ ເຫວ ກວນ (Tiong Hoa Hwe Koan T.H.H.K) ໃນເດືອນມີນາ 1900 ແລະກໍແມ່ນ ສະມາຄົມນີ້ເອງທີ່ໄດ້ໄຂ ໂຮງຮຽນຈີນສະໄຫມໃຫມ່ແຫ່ງທຳອິດ ຢູ່ດອນອິນດີສ ບັດຕາເວຽ, ອີກປີນຶ່ງຕໍ່ມາ ໃນເມືອງສຳຄັນອື່ນໆ ຂອງຊະວາ ກໍມີການເຮັດນຳກັນຢ່າງໄວວາ. ໃນໂຮງຮຽນແບບນັ້ນ ພວກເດັກນ້ອຍ ລູກຊອດພື້ນເມືອງ ໄດ້ຮຽນກັບລູຫນຸ່ມຫົວຊາດນິຍົມທີ່ສົ່ງມາຈາກຈີນ ແລະຍັງໃຊ້ປຶ້ມແບບຮຽນຈາກຈີນ. ຍິ່ງກວ່າສິ່ງໃດຫມົດ ມີແຕ່ພວກລູກຊອດເປເຣນາກັນທີ່ປາກເວົ້າພາສາຮົກກຽນ ແລະມາເລ ອ່ານພາສາມາເລ ທີ່ຂຽນ ດ້ວຍອັກສອນໂຮມັນໄດ້ເທົ່ານັ້ນ ຈຶ່ງຮຽນດ້ວຍພາສາເກົ່າ ອັນເປັນພາສາປະຈຳຊາດຈີນ ແລະ ພວກເຂົາ ກໍກາຍມາເປັນຜູ້ຮູ້ອ່ານຮູ້ຂຽນອັກສອນຈີນ. ດັ່ງນັ້ນ ພວກເຂົາຈຶ່ງແຕ່ງອົງຊົງເຜດທີ່ເປັນ ເອກະລັກທາງ ວັດທະນະທຳໃຫມ່ ທັນສະໄຫມ ຊາດນິຍົມ ແລະ ເປັນແບບຈີນຢ່າງເຕັມປ່ຽມທີ່ສຸດ.

ພາກສ່ວນຂອງຊຸມຊົນເປຣານາກັນ (ລູກຊອດພື້ນເມືອງ) ທີ່ຕັ້ງຕົວຂຶ້ນບົນເສັ້ນທາງນີ້ ທຳອິດກໍມີ ຜູ້ຕິດຕາມຄຽງຄູ່ໄປນຳ ແຕ່ຕໍ່ມາກໍຖືກບຽດຍາດໄປໂດຍພວກຈີນໂຕະຕົກ. ການຕີບໃຫຍ່ຢ່າງວ່ອງໄວ ທາງເສດຖະກິດ ຫລັງປີ 1870 ໄດ້ເຮັດໃຫ້ຊາວຈີນອົບພະຍົບເຂົ້າມາຢູ່ຊະວານັບມື້ນັບຫລາຍຂຶ້ນ ຄືກັບ ບ່ອນອື່ນໆ ໃນດອນອິນດີສ. ໃນຍົງເຂດເຊັ່ນ ດອນສຸມາຕຣາຕາເວັນອອກ ເຊິ່ງແຕ່ກ່ອນ ບໍ່ມີຊຸມຊົນຈີນລູກ ຊອດທ້ອງຖິ່ນມາຕັ້ງຖິ່ນຖານຢູ່, ສັງຄົມຊາວອົບພະຍົບມີລັກສະນະ ເປັນແບບຈີນຕ່າງດ້າວໂຕະຕົກ ມາ ຕັ້ງແຕ່ທຳອິດ. ເທິງດອນຊະວາ ຂະບວນການທີ່ດຳເນີນມາແລ້ວ ໃນການກືນກິນຜູ້ມາຮອດໃຫມ່ເຂົ້າໃນ ຊຸມຊົນລູກຊອດ ເປຣານາກັນ ສືບຕໍ່ມາຈົນຮອດຈຸດຫັນປ່ຽນສະຕະວັດໃຫມ່ ແລ້ວກໍຍຸຕິລົງ. ເຫດຜົນອັນນຶ່ງ ກໍແມ່ນພວກອົບພະຍົບເຂົ້າມາໃຫມ່ ມີຈຳນວນຫລາຍຂຶ້ນເລື້ອຍໆ ແລະນັບເປັນຄັ້ງທຳອິດ ທີ່ພວກແມ່ຍິງ ລູກຊອດຕ່າງດ້າວ ຕິດຕາມມາອີກຈຳນວນຫລາຍເຕີບ ແລະບັດນີ້ ກໍເປັນຜູ້ເຮັດໃຫ້ຄອບຄົວລູກຊອດໂຕະຕົກ ທັງຫມົດ ສາມາດເຂັ້ມແຂງ ຂັດຂືນຕໍ່ການເຂົ້າຢູ່ຮ່ວມຫມູ່. ອັນສຳຄັນກວ່ານີ້ ໃນຍຸກທີ່ລັດທິຊາດນິຍົມຈີນ ພວມລຸກຂຶ້ຢູ່ແລ້ວ ພວກລູກຊອດຕ່າງດ້າວ ມີເຫດຜົນທຸກແນວ ທີ່ຕ້ອງກອດຕິດຢູ່ກັບຄວາມເປັນຈີນອ້ອຍ ຕ້ອຍຂອງພວກເຂົາ ແລະເບິ່ງວິຖີຊີວິດພວກເປຣານາກັນວ່າ ເປັນການຍອມຮັບອັນໄຮ້ກຽດຢ່າງນຶ່ງ. ໂດຍ ຈັດການສົ່ງລູກຫລານຂອງພວກເຂົາໄປເຂົ້າໂຮງຮຽນຕາມລະບົບຈີນທີ່ພວມເຕີບໃຫຍ່ນັ້ນ ໃນຕົວຈິງພວກ ເຂົາສາມາດ ເຮັດໄດ້ຫລາຍສິ່ງຫລາຍກວ່າການຍຶດຈ່ອງລ້າໆ ເພາະວ່າອາໄສການສຶກສາໃນ ພາສາ ເກົາຢູ (Kyo Yu) ນັ້ນ ພວກເຂົາສາມາດ ລະລາຍລັກສະນະພິເສດສຸດໂຕ່ງຂອງ ຫັກກາ ກວ໋ງຕຸ໋ງ ຫລື ເສສວນ ເຂົ້າກັບວັດທະ ນະທຳຈີນໃຫມ່ທັນສະໄຫມ.

ນັບຈາກຂະບວນການນັ້ນ ປະມານປີ 1915 ໄດ້ເກີດມີຊຸມຊົນຈີນພິເສດໃຫມ່ຂຶ້ນ ໃນດອນອິນດີສ ໂດຍມີພວກໂຕະຕົກຄອບງ໋ຳຢູ່ເປັນສ່ວນໃຫຍ່ ແຕ່ຕໍ່ມາກໍມີພວກລູກຊອດພື້ນເມືອງ ທີ່ໄດ້ຮັບການສຶກສາ ແບບຈີນຈຳນວນສຳຄັນເຕີບ ເຂົ້າມາປົນຢູ່ນຳ. ໃນທາງການເມືອງ ສະມາຊິກທັງຫລາຍຂອງຊຸມຊົນນີ້ ບໍ່ມີທ່າອຽງເຂົ້າຂ້າງອິນດີສເລີຍ ແຕ່ເຂົ້າຂ້າງຈີນພູ້ນ. ພວກເຂົາໄດ້ມີສ່ວນຊ່ວຍ ເວລາເກີດອຶດຢາກຢູ່ປະ ເທດຈີນ ແລະໃນເວລາຖືກຮຸກຮານ ກໍຈັດຕັ້ງກັບຂວ້ຳບາດຍີ່ປຸ່ນ ອັ໋ງກິດ ຫລື ຈັກກະພັດອື່ນໆ. ພວກໂຕະ ຕົກຈີນ ເຮັດຍິ່ງກວ່າພວກໂຕະຕົກດັດຊ໌ ກັບ ລູກຊອດຝຣັ່ງອາຊີ ອີກ ຄືພວກເຂົາສາມາດທ້ອນໂຮມເອົາ ກັນໄປຢູ່ທ້ອງ ນ້ອຍໆ ແຄບໆ ທີ່ແຈນຶ່ງຂອງສັງຄົມອັນກວ້າງໃຫຍ່ກວ່າຂອງອິນດີສ.

ຄືກັບພວກລູກຊອດຝຣັ່ງອາຊີ (ເອີຣາຊຽນ) ພວກລູກຊອດທ້ອງຖິ່ນ(ເປຣານາກັນ)ຈຳນວນຫລາຍ ໄດ້ຕິດຕາມນຳຮອຍພວກລູກຊອດຕ່າງດ້າວຂອງພວກເຂົາ ໃນການສະແຫວງຫາເອກະລັກແຫ່ງຊາດໃໝ່ ໂດຍສຸມໃສ່ບ້ານເກີດເມືອງນອນ ນອກດິນແດນອິນດີສ. ແຕ່ພວກລູກຊອດທ້ອງຖິ່ນເປັນປະຊາກອນທີ່ມີພື້ນຖານຫມັ້ນຄົງ ຢັ່ງຮາກເລິກເຊິ່ງມາເປັນເວລາດົນນານ ໃນດອນອິນດີສ. ໃນສະຕະວັດທີ 20 ກຸ່ມຄົນ ຂະຫນາດໃຫຍ່ກຸ່ມນຶ່ງ ໄດ້ເຂົ້າຮ່ຳຮຽນໃນໂຮງຮຽນເຜີຍແຜ່ສາສະຫນາ ທີ່ໄດ້ໄຂປະຕູໃຫ້ແກ່ການເຂົ້າຫາ ເອກະລັກທັນສະໄຫມ ບົນພື້ນຖານວັດທະນະທຳເອີຣົບ. ຍັງອີກກຸ່ມໃຫຍ່ກວ່າ ໄປເຂົ້າໂຮງຮຽນລັດຖະບານ ທີ່ສອນເປັນພາສາດັດຊ໌-ຈີນ ເຊິ່ງກໍຖືກສ້ຳເສີມໄຂຂຶ້ນໃນປີ 1908. ໃນຊຸມປີຕໍ່ໆມາ ກົດຫມາຍ ຂອງອິນດີສ ກໍໄດ້ຮັບການທົບທວນເພື່ອໃຫ້ພວກເປຣານາກັນ ມີສະຖານະພາບທາງກົດຫມາຍໃກ້ຄຽງ ກັບຄົນເອີຣົບ, ແລະພວກເຂົາກໍໄດ້ເຂົ້າເຖິງການສຶກສາດ້ວຍພາສາດັດຊ໌-ຈີນ ໃນລະດັບສູງກວ່າ, ໄດ້ເຂົ້າຮັບລາຊະການ ແລະເປັນທີ່ເປີກສາໃນອົງການກົດຫມາຍເຊັ່ນພວກໂຟກຊ໌ເຣດ (Volks raad). ພວກຫົວຫນ້າຜູ້ໃຫມ່ສ່ວນໃຫຍ່ ຂອງຊຸມຊົນລູກຊອດທ້ອງຖິ່ນເປຣານາກັນ ໄດ້ໄປຕາມເສັ້ນທາງນັ້ນ ແລະພວກລູກຊອດທ້ອງຖິ່ນທີ່ຮັບການສຶກສາແບບດັດຊ໌ ກໍໄດ້ສະແດງທ່າອຽງອັນແນ່ນອນເມື່ອທົດສະວັດຕໍ່ມາ ເພື່ອມຸ່ງຫນ້າສູ່ອາຊີບ ພະນັກງານນັ່ງໂຕະຕັ່ງ (ຄໍເສື້ອຂາວ) ວຽກງານການບໍລິການໃນລັດຖະບານ ແລະວິຊາຊີບອື່ນໆ ສ່ວນພວກໂຕະຕົກ (ລູກຊອດຕ່າງດ້າວ) ຍັງຄົງຍຶດຄອງວຽກງານການຄ້າຢ່າງຫມັ້ນຫນຽວ. ໃນຂະນະທີ່ພວກນາຍທະຫານຊັ້ນນາຍພັນ ນາຍຮ້ອຍ ຫລີກທາງຫນີແລ້ວ. ລະບຽບສັງຄົມໃຫມ່ຂອງ ພວກລູກຊອດເປຣານາກັນ ກໍຜາກົດຕົວອອກຫນ້າພາທາງໂດຍຜູ້ທີ່ມີການສຶກສາສູງ ເຊັ່ນ ພວກທ່ານຫມໍ ອາຈານ ແລະ ນັກກົດຫມາຍ.

ອີກຢ່າງນຶ່ງ ພວກລູກຊອດທ້ອງຖິ່ນເຫລ່ານີ້ ກໍໄດ້ສືບທອດຊຸມຊົນເກົ່າແກ່ພິເສດຂອງພວກເຂົາ ຊຸມຊົນນຶ່ງໄວ້ດ້ວຍການນຸ່ງຖືແບບວັດທະນະທຳໃຫມ່. ແຕ່ຊຸມຊົນລູກຊອດທ້ອງຖິ່ນບໍ່ເຄີຍອັດທາງຕັນຕົນເອງ ຄືພວກລູກຊອດຕ່າງດ້າວ ທີ່ເປັນພວກດັດຊ໌ ກັບ ຝຣັ່ງ-ອາຊີ(ເອີຣາຊຽນ) ແລະຄົນຈີນ. ຊຸມຊົນດັດຊ໌ພວກນີ້ ຍັງຄົງປະກອບດ້ວຍ ພວກແພດຫມໍດັດຊ໌ຜູ້ມີການສຶກສາດີ ເຈົ້າຂອງຮ້ານຄ້າຊາວຈີນຜູ້ມີການສຶກສາ ແລະພໍ່ຄ້າທີ່ເວົ້າພາສາມາເລ ເຊິ່ງຢູ່ໃນນັ້ນ ສາຍພົວພັນຄອບຄົວໄດ້ແຜ່ຕາຫນ່າງຂອງມັນອອກກວ້າງຂວາງ. ສຸພາບບຸລຸດເຊັ່ນ ກວີ ເກກ ເບ໋ງ (Kwee Kek Beng) ບັນນາທິການຫນັງສືພິມ ຊິນໂປ (Sin Po) ໄດ້ຮັບການສຶກສາແບບດັດຊ໌ ເປັນຜູ້ຫ້າວຫັນເພື່ອພາລະກິດຊາດນິຍົມຈີນ ແລະໄດ້ຮຽນອັດຕະຊີວະປະຫວັດ ເປັນພາສາເປຣານາກັນມາເລ ແລະຢູ່ໃນຊະວາຕາເວັນອອກ ເມື່ອຊຸມປີ 1930 ພວກລູກຊອດ ທ້ອງຖິ່ນນ້ອຍໆ ກຸ່ມນຶ່ງ ໄດ້ຕັ້ງພັກການເມືອງ ຊື່ ປາຣໄຕ ຈ໋ງຫົວ (Partai Tionghoa Indonesia /Chinese Indonesian Party ພັກຄົນຈີນ ອິນໂດ) ເຊິ່ງສະຫນັບສະຫນຸນພາລະກິດຊາດນິຍົມ ອິນໂດເນເຊຍ ນັ້ນເປັນລາງບອກເຖິງການກຳເນີດຂະບວນການລູກຊອດຊຸດໃຫມ່ໃນຕໍ່ຫນ້າ.

ການປ່ຽນແປງຢູ່ໃນຫມູ່ຊົນຊາວດັດຊ໌ກັບຊາວຈີນ ສະແດງໃຫ້ເຫັນວ່າ ກຳລັງສັງຄົມມີອຳນາດຢ່າງໃດໃນການປະຕິບັດຫນ້າທີ່ ຢູ່ໃນຫມູ່ເກາະດອນອິນດີສ ເນີເທີແລນ ເມື່ອຊຸມປີຕົ້ນໆຂອງສະຕະວັດທີ 20 ພວກເຂົາຍັງໄດ້ສະແດງວາທະແບບປົດສະຫນາອອກມາ ຍ້ອນວ່າເມື່ອກຸ່ມເຫລ່ານີ້ຖືກກີດກັນໂດດດ່ຽວຫລາຍ ຢູ່ໃນລະບົບເສດຖະກິດອິນດີສ ອັນຊັບຊ້ອນ, ພວກເຂົາຈຶ່ງໄດ້ຊັກຊວນກັນແຍກຕົວ ໄປຢູ່ໃນເຮືອນຕຶກສ່ວນຕົວຂອງພວກເຂົາເອງ. ນັ້ນແມ່ນການພິສູດຢ່າງເປີດເຜີຍ ເຖິງຄວາມອ່ອນແອ ຂັ້ນປາງຕາຍນຶ່ງ, ແຕ່ໃນຍຸກລັດທິອານານິຄົມຂຶ້ນແຮງ, ມັນຊ້ຳມີຄວາມຫມາຍຕັດສິນກວ່າຫລາຍ. ຄົນກຸ່ມນ້ອຍ ທີ່ມີອຳນາດຄອບຄຸມເຫລ່ານີ້ ແຍກຕົນເອງອອກຈາກພົນລະເມືອງທົ່ວໄປ ໄດ້ສະລະອຳນາດຂອງພວກເຂົາ ເພື່ອຊຸກຍູ້ການພັດທະນາຢູ່ພາຍໃນຫມູ່ປະຊາຊົນນັ້ນ ແລະເພື່ອກືນເອົາຂະບວນການໃຫມ່ ຊົນຊັ້ນນຳພາໃຫມ່ ແລ້ວກໍຈະພົ້ນເດັ່ນຂຶ້ນມາຈາກຂະບວນການນີ້. ທັງຖືກບີບບັງຄັບ ຖືກປົດປ່ອຍ ບາດແລ້ວກໍເພື່ອຊອກຫາເອກະລັກວັທະນະທຳໃຫມ່ ແລະບົດບາດທາງສັງຄົມ, ຂອງຕົນເອງ, ຜູ້ອ່ອນແອໃນຍຸກນັ້ນ ກໍໄດ້ພົບເສັ້ນທາງ ເພື່ອກາຍເປັນຜູ້ເຂັ້ມແຂງ.

ແຕ່ມັນກໍແມ່ນວຽກອັນຍິ່ງໃຫຍ່ຢ່າງນຶ່ງ. ຫມູ່ເກາະດອນອິນດີສ ໃນຕົ້ນສະຕະວັດທີຊາວ ເຕົ້າໂຮມເອົາໂລກທັງຫມົດຂອງສັງຄົມຊາວພື້ນເມືອງ ຄື: ທັງນ້ອຍທັງໃຫຍ່ ບໍ່ວ່າ ອິດສະລາມ, ຮິນດູ ພຸດ ຄຣິດສ ແລະຜູ້ນັບຖືຜີສາງ, ຜູ້ເຮັດນາດໍາ ເຮັດໄຮ່ຈູດເຜົາແລະພໍ່ຄ້າຊາວຂາຍ ບັນດາເມືອງນ້ອຍໃຫຍ ແລະກຸ່ມສາຍຍາດຜູ້ຮູ້ອ່ານອອກຂຽນໄດ້ ແລະຜູ້ກຶກຫນັງສື. ມີຄວາມຄ້າຍຄືກັນຫລາຍຢ່າງ ໃນເລື່ອງປະສົບການທາງປະຫວັດສາດ ຮີດຄອງທາງດ້ານສິລະປະ ແລະຄວາມຄຶດເຊື່ອຖືທາງສາສະຫນາ ຂອງຜູ້ຄົນໃນສັງຄົມເຫລົ່ານັ້ນ, ແຕ່ວ່າ ທຸກສັງຄົມກໍມີຄວາມສົມບູນໃນຕົວເອງ ມີຮີດຄອງວັດທະນະອັນແປກຕາງ ກໍານົດໄວ້ ແລະບັງຄັບປະຕິບັດ ໂດຍພາສາປາກເວົ້າຂອງຕົນເອງ ແລະໃຊ້ຮ່ວມກັນກັບຊົນຊັ້ນສູງ ກັບພວກຜູ້ຄົນສາມັນຄືໆກັນ. ສະມາຊິກຂອງສັງຄົມເຫລົ່ານີ້ ຂະນະທີ່ພວມສະແຫວງຫາແນວທາງປັບຕົວເຂົ້າກັບຄວາມທັນສະໄຫມ ກໍໄດ້ມີແບບຢ່າງເພື່ອຊົມໃຊ້ ແຕ່ມັນເປັນຂອງຕ່າງປະເທດ ແລະຍາກທີ່ຈະແປອອກມາ. ບໍ່ມີຄໍາເວົ້າສໍານວນມາກ່ອນເພື່ອເວົ້າເຖິງຄວາມທັນສະໄຫມ ສໍາລັບສັງຄົມຊາວພື້ນເມືອງໃດໆໃນຫມູ່ເກາະດອນອິນດີສ ຈຶ່ງຕ້ອງປ່ອຍໃຫ້ພວກເຂົາທັງຫມົດຢູ່ຢ່າງໂດດດ່ຽວນໍາກັນ. ນີ້ແມ່ນສິ່ງທີ່ສະມາຊິກ ຂອງສັງຄົມເຫລົ່ານີ້ ຕ້ອງເຮັດເພື່ອຕົນເອງ ເພາະວ່າພວກເຂົາໄດ້ເລືອກເອົາແນວນັ້ນ ນັ້ນກໍຄື ວຽກງານອັນຍິ່ງໃຫຍ່ແຫ່ງການປະດິດສ້າງເອກະລັກຂອງຕົນ ແລະສ້າງຄືນອີກ ຢ່າງບໍ່ເລີກບໍ່ແລ້ວເປັນ.

ໃນຈໍານວນປະຊາກອນທີ່ນັບໄດ້ຮອດ 40 ລ້ານຄົນ ໃນປີ 1905 ແລະຖືກແບ່ງອອກເປັນສິບກວ່າສັງຄົມອັນແຕກຕ່າງກັນນັ້ນ, ຖັນແຖວທາງເລືອກທີ່ຖືກສະເຫນີໃຫ້ ແລະຫົນທາງແຫ່ງການປ່ຽນແປງທີ່ຕ້ອງເປັນໄປ ກໍມີຫລາກຫລາຍເປັນຈໍານວນນັບບໍ່ໄດ້. ສັງຄົມແຕກຕ່າງກັນ ມີຄວາມຕ້ອງການສໍາລັບການປ່ຽນແປງທີ່ແຕກຕ່າງກັນອອກໄປ. ຕົວຢ່າງ ຊາວບາຫລີ ຕ້ອງການຄວາມເປັນບາຫລີຢູ່ຄືເກົ່າ. ເມື່ອຖືກໂດດດ່ຽວ ໂດຍຊາວສອນແລະກະສິກອນປູກອ້ອຍຄົນດັດຊ໌ ຂະເຈົ້າຍັງພໍໃຈເປັນຢ່າງດີກັບລະບຽບ ວັດທະນະທໍາອັນລະອຽດອ່ອນຂອງຕົນ, ຊາວບາຫລີ ໄດ້ຕອບໂຕ້ຕາມຮູບແບບຂອງຕົນ ໂດຍການເລືອກຮັບປັບແປງເອົາສິນລະປິນຕາເວັນຕົກ ຜູ້ໄດ້ຮັບຄວາມນິຍົມຊົມຊອບທີ່ສຸດຈໍານວນຍີບມືນຶ່ງ ມາເປັນຕົວກະຕຸ້ນໃນການຮັບເອົາໂຮງຮຽນແຕ້ມຮູບແລະຄວັດລາຍ (ສິນລະປະ) ແບບບາຫລີ ແບບໃຫມ່ເຂົ້າມາ ອັນໄດ້ເປັນການປະຕິວັດທາງສິນລະປະ ທີ່ບໍ່ມີຫຍັງປຽບທຽບໄດ້ໃນຫມູ່ເກາະດອນອິນດີສຍຸກນັ້ນ. ຢູ່ບ່ອນອື່ນ ຕົວຢ່າງ ພວກບູກິສ ແລະ ມາກັສສາຣ໌ ມີຄວາມກ້າຫານໃນການສ້າງປະສົບການຂອງຕົນ ຫນ້ອຍກວ່າເພື່ອນສະຫາຍຊາວມຸດສະລິມ ເທິງດອນສຸມາຕຣາ. ໂດຍທົ່ວໄປພວກຊາວນາ ໂດຍສະເພາະ ໃນສັງຄົມໃຫຍ່ທີ່ມີການແບ່ງຊັ້ນທາງສັງຄົມຫລາຍກວ່າ ມັກເຄື່ອນໄຫວຊັກຊ້າກວ່າໃນສັງຄົມນ້ອຍໆ ຂອງຊົນຊັ້ນສູງ ທີ່ໄດ້ຮັບການສຶກສາແບບສະໄຫມໃຫມ່ ແລະກ້າສ່ຽງກັບການປັບປ່ຽນຕົນເອງ.

ການປ່ຽນແປງແນວນັ້ນ ດໍາເນີນໄປໃນທິດທາງທີ່ແຕກຕ່າງກັນຫລາຍດ້ານ, ແຕ່ໃນຄວາມເປັນຈິງແລ້ວ ພວກເຂົາທັງຫມົດໄດ້ເລີ່ມຕົ້ນຕາມແບບໃດແບບນຶ່ງໃນສາມຮູບແບບການສຶກສາ ຄືໃນຄວາມຫມາຍເລິກລໍ້າ ເທົ່າໆກັບໃນຄວາມຫມາຍແບບແຄບໆອັນນຶ່ງ ຂອງການໄປໂຮງຮຽນ. ອັນນຶ່ງ ແມ່ນແບບຄຣິດສຕຽນ, ອັນທີສອງ ແບບອິດສະລາມ ແລະອັນທີສາມ ແມ່ນແບບຢູ່ໃນຫ້ອງຮຽນຂອງໂຮງຮຽນ ທີ່ສອນດ້ວຍ ພາສາດັດຊ໌ ແບບທັນສະໄຫມ.

ສາສະຫນາຄຣິດສ໌ ມີອິດທິພົນຫນ້ອຍດຽວ ໃນຫມູ່ເກາະດອນຕ່າງໆ ໃນລະຍະກ່ອນຫນ້າປີ 1800, ແຕ່ຂະບວນການຂອງຄະນະເຜີຍແຜ່ ໃນທົ່ວໂລກໃນສະຕະວັດທີ 19 ແລະ 20 ໄດ້ຂະຫຍາຍຕົວຢ່າງທົ່ວເຖິງໃນທຸກສັງຄົມ ແຫ່ງຫມູ່ເກາະດອນອິນດີສ. ພາລະກິດຂອງຄະນະ ມີຜົນກະທົບຢ່າງສໍາຄັນ ໃນເຂດທີ່ບໍ່ນັບຖືອິດສະລາມ ຢູ່ນອກບໍລິເວນດອນຊະວາ. ຫລາຍເຂດໃນພາກພື້ນນີ້ ເປັນທີ່ຢູ່ອາໄສຂອງພວກເຮັດໄຮ່ເລື່ອນລອຍ ທີ່ກະຈາຍກັນຢູ່ທົ່ວຄ້າຍຄືກັບກຸ່ມອື່ນໆທີ່ຢູ່ເຂດໃນຂອງດອນບໍນຽວ, ໃຈກາງດອນຊີລີເບສ໌ ແລະເທິງດອນຟລໍເຣສ. ເປັນຄັ້ງທໍາອິດ ທີ່ຄະນະເຜີຍແຜ່ເຫລົ່ານັ້ນ ໄດ້ໃຫ້ໂອກາດແກ່ປະຊາຊົນຢູ່ຫັ້ນ ໄດ້ເຂົ້າເຖິງການຮູ້ຫນັງສື ແລະໂລກະທັດອັນກວ້າງຂວາງກວ່າເກົ່າ ທີ່ໄຂອອກໂດຍໂລກສາສະຫນາ ອັນເປັນປະສົບການທີ່ຊາວອາຊີຕາເວັນອອກສຽງໃຕ້ສ່ວນໃຫຍ່ ໄດ້ລ່ວງຫນ້າໄປກ່ອນແລ້ວຫລາຍຮ້ອຍປີ ຫລື ຫລາຍພັນ

ປີ. ກ່ອນປີ 1940 ປະຊາຊົນສ່ວນຫລາຍ ກຳລັງສົນລະວົນຢູ່ກັບການສ້າງເງື່ອນໄຂເພື່ອການປ່ຽນແປງ ປະເພດນີ້: ການສ້າງເອກະລັກໃຫມ່ຮ່ວມກັນທີ່ກວ້າງໃຫຍ່ກວ່າເຊັ່ນ ສຳລັບພວກ ດາຢັກ ໂຕຣະຊາ ແລະ ຟລໍຣິນີສ ຫລືວ່າ ສ້າງສາສະຫນາໃຫມ່ຂຶ້ນ ເຊິ່ງໃນຄວາມເປັນຈິງແມ່ນການສ້າງກຳແພງ ປ້ອງກັນຕໍ່ຕ້ານການບຸກຮຸກອັນຫນັກຫນ່ວງ ຈາກຄົນບ້ານໃກ້ເຮືອນຄຽງຊາວມຸສະລິມນັ້ນເອງ.

ຜົນກະທົບ ໄດ້ຮັບຄວາມສຳເລັດເກີນກວ່າຄາດໄວ້ຫລາຍ ຢູ່ໃນຊຸມຊົນຊາວໂຕບາ ບະຕັກ ພາກເຫນືອກາງ ຂອງ ສຸມາຕຣາ. ຊາວໂຕບາ ປະກອບກັນເປັນສັງຄົມຊາວນາດຳ ທີ່ເປັນກ້ອນເປັນກຸ່ມຂະຫນາດໃຫຍ່ ແລະມີຮີດຄອງເຂັ້ມແຂງ ໃນເລື່ອງການບຸກເບີກດິນປູກຝັງ. ລຸນຫລັງຊຸມປີ 1860 ກຳລັງເຄື່ອນເຫນັງອັນນີ້ ພົບວິທີສະແດງຄວາມຕ້ອງການແບບໃຫມ່ ຢູ່ໃນຊ່ອງທາງທີ່ໄຂຂຶ້ນ ໂດຍ ຄະນະເຜີຍແຜ່ ນິກາຍ ເຣນິຊ ໂປຣເຕສຕັງເຢຣູລະມັນ (German Protestants of the Rhenish Mission). ໂດຍສະເພາະພວກຊາວຫນຸ່ມ ໂຕບາ ໄດ້ແນມເຫັນທິດທາງສ້າງກຽດສັກສີແບບໃຫມ່ອ່ຽມນີ້ ດ້ວຍການເຂົ້າເປັນນັກເຜີຍແຜ່ ສາສະຫນາ ແລະເປັນຄູສອນໃນໂຮງຮຽນ ຕາມໂຮງຮຽນສາສະຫນາຕ່າງໆ. ເຖິງປີ 1917 ຂະບວນການນັ້ນ ໄດ້ກ້າວຫນ້າໄປຮອດຈຸດສູງສຸດ ດ້ວຍການຕັ້ງສະມາຄົມ ຊື່ວ່າ "ຮາໂຕປັນ ຄຣິດຕຽນ ບາຕັກ (Hatopan Kristen Batak H.K.B.) ຫລື ສະມາຄົມຄຣິດສຕຽນບາຕັກ ເຊິ່ງໄດ້ໃຫ້ຮູບປະທຳແບບໃຫມ່ແກ່ເອກະລັກຂອງພວກເຂົາ ໃນນາມ ຄຣິດສ໌ຕຽນບາຕັກ ທັນສະໄຫມ ແລະຍັງເປັນຜູ້ນຳພາໃນການຕໍ່ສູ້ຊາວຫ້າປີ ຕ້ານກັບອຳນາດການປົກຄອງແບບຫລ້າສະໄຫມຂອງຄະນະເຜີຍແຜ່ເຣນິຊ. ແຕ່ສະມາຄົມ ຮາໂຕປັນ ຄຣິດສ໌ຕຽນ ບາຕັກ (H.K.B.) ໄດ້ພິສູດໃຫ້ເຫັນວ່າ ໃນຄວາມຫມາຍທາງການເມືອງແລ້ວ ສະມາຄົມ ເປັນພຽງທາງຜ່ານເທົ່ານັ້ນ, ຍ້ອນວ່າເປັນຕົວແທນໃຫ້ແກ່ລັດທິຊາດນິຍົມ ຄຣິດສ໌ ຕຽນ ທີ່ມ່ຽງຫນ້າຄັດຄ້ານກັບລັດທິອານານິຄົມອັນຄັບແຄບ ກັບຂອງຄະນະທູດເຜີຍແຜ. ແມ່ນແຕ່ໃນຂະນະພວມກໍ່ຕັ້ງຢູ່ແທ້ໆ ໂຕບາ ກໍຍັງຖືກກົດດັນຢ່າງແຮງ ໃຫ້ເຂົ້າໄປໃນໂຮງຮຽນສອນພາສາ ດັດຊ໌ ທີ່ຕັ້ງຂຶ້ນໃຫມ່ໃນເຂດຄຸ້ມ ແລະຂະຫຍາຍຕົວອອກຢ່າງໄວ ຢູ່ໃນເຂດປູກຝັງໃກ້ຄຽງຄື ເມດານ ແລະບັດຕາເວຽ ກັບຕົວເມືອງອື່ນໆ ເທິງດອນຊະວາ. ຕາມບໍລິເວນຊາຍແດນໃຫມ່ເຫລ່ານີ້ ພວກເຂົາໄດ້ວຽກເຮັດ ແບບຕ່າງໆກັນ ເຊັ່ນເປັນຂ້າລາຊະການ ພົນລະເຮືອນ ຄູສອນໃນໂຮງຮຽນ ນາຍຫມໍ ແລະເຂົ້າຮ່ວມຢ່າງ ແຂງຂັນໃນການກໍ່ສ້າງເອກະລັກທີ່ກວມກວ້າງກວ່າ.

ການສຶກສາຕາມແບບອິດສະລາມ ແລະການປ່ຽນແປງຕົນເອງ ຍັງຈະມີຄວາມສຳຄັນຫລາຍກວ່າ ນັ້ນອີກ ຖ້າຫາກພຽງແຕ່ວ່າ ຄົນຈຳນວນຫລາຍໃນເກາະດອນອິນດີສ ຈະຖືກເອີ້ນວ່າເປັນມຸດສະລິມ. ກ່ອນປີ 1900 ມີຂໍ້ຍົກເວັ້ນບາງຢ່າງ, ໃນທົ່ວຫມູ່ເກາະດອນ ອິດສະລາມເປັນສາສະຫນາ ທີ່ນັບຖືປະຕິບັດໃນຖານະສາສະຫນາປະຈຳທ້ອງຖິ່ນຕາມປະເພນີ. ເດັກນ້ອຍຜູ້ຊາຍເຂົ້າຮຽນຄຳພີກູຣະອານ ເພື່ອຮຽນຮູ້ຂໍ້ປະຕິບັດທັງຫລາຍຂອງຊຸມຊົນຜູ້ໃຫຍ່ມຸດສະລິມ, ດ້ວຍຈຸດປະສົງນີ້ ມັນຈຶ່ງບໍ່ມີບັນຫາໃດໆທີ່ ພວກເຂົາໄດ້ຮຽນເລົ່າ ເປັນພາສາອາຣັບ ທີ່ພວກເຂົາບໍ່ສາມາດຂ້ຳໃຈຫຍັງເລີຍ ແຕ່ຜັດແມ່ນກະໂຕສິ່ງນີ້ເອງ ທີ່ຮັບປະກັນສ້າງ ຄວາມເລິກລັບໃຫ້ແກ່ສິ່ງສັກສິດຕ່າງໆ ທີ່ຫໍ່ຫຸ້ມພາຍນອກຂອງມັນ ແມ່ນສິ່ງທີ່ພວກເຂົາ ທ່ອງເລົ່າໄດ້ຢົ້ນໃຈ. ພວກນັກປາດອາຈານມຸດສະລິມ ເຫັນການແຂ່ງຂັນຊ່ວງເສັງທາງສະຕິປັນຍາ ແລະຄວາມຮູ້ແຈ້ງໃນການສຶກສາຂອງຕົນກ່ຽວກັບວັນນະຄະດີທາງສາສະຫນາອັນມາກມາຍ ແລະໄດ້ຮັບໃຊ້ໃນບົດບາດອັນຈຳເປັນ ໃນນາມຜູ້ຊ່ຽວຊານຢ່າງຖືກຕ້ອງຕາມກົດຫມາຍແລະຜູ້ນຳທາງຈິດໃຈ. ສາສະຫນາອິດສະລາມ ໄດ້ເຊື່ອມຊຶມເຂົ້າກັບຄວາມເຊື່ອຖືທ້ອງຖິ່ນຢ່າງນິ່ມນວນກົມກ່ອມໃນທຸກໆແຫ່ງ.

ເຖິງແນວໃດກໍດີ ຊີວິດຢູ່ເທິງຫມູ່ເກາະດອນອິນດີສ ເມື່ອສະຕະວັດທີ 20 ຕອນຕົ້ນ ກໍໄດ້ນຳເອົາປະສົບການໃຫມ່ໆທີ່ນັບມື້ນັບຫຍຸ້ງຍາກຫລາຍຂຶ້ນ ເພື່ອໃຫ້ເຊື່ອມຕິດເຂົ້າກັບຂອບເຂດຄວາມນຶກຄຶດທີ່ໄດ້ມາແຕ່ເກົ່າຕາມສຳນວນເດີມຂອງອິດສະລາມ. ບໍ່ແມ່ນມີແຕ່ ລັດຖະບານຄຣິດສ໌ຕຽນເທົ່ານັ້ນ ທີ່ຂົ່ມຂູ່ ຫລືທ້າທາຍວິຖີຊີວິດແບບເກົ່າ ແຕ່ຍັງມີໂອກາດໃຫມ່ໆນຳອີກ ແລະເພື່ອສວຍໃຊ້ໂອກາດເຫລ່ານັ້ນ ຄົນເຮົາຕ້ອງການຮູບພາບໃຫມ່ ແທນຜູ້ທີ່ເຂົາເຄີຍເປັນມາກ່ອນ ແລະພວມເຮັດຫຍັງຢູ່. ການທີ່ຈຳນວນ ຊາວມຸດ

ສະລິມຫລາຍຂຶ້ນໆນັ້ນ ກໍ່ໃຫ້ເກີດຄວາມສົງໄສຕໍ່ຄວາມເໝາະສົມ ສິ່ງທີ່ເຄີຍເປັນເອກະລັກອັນສົມໃຈ ຢ່າງ ສົມບູນແບບມາແລ້ວ, ໃນຄວາມຕ້ອງການນັ້ນ ມີການສະເໜີແບບຢ່າງຂອງຄວາມທັນສະໄໝ ຂອງ ພາຍນອກ ເຊັ່ນການປະຕິຮູບອິດສະລາມ ເຊິ່ງໄດ້ເກີດຂຶ້ນໃນຕາເວັນອອກກາງ ເມື່ອຊຸມປີຫລ້າໆ ຂອງ ສະຕະວັດທີ 19 ນັ້ນ ເປັນການຕອບສະໜອງຢ່າງຖືກຕ້ອງຕໍ່ຄວາມຕ້ອງການ ອັນເຮັ່ງຮີບແບບດຽວກັນ. ການປະຕິຮູບອິດສະລາມ ຊຸກຍູ້ການກັບຄືນໄປຫາສິ່ງທີ່ເອີ້ນກັນວ່າ "ຄວາມເປັນຈິງ ອັນພື້ນຖານຂອງພະ ຄຳພີກຸຣອານ (truths of the Kuran), ໂດຍປະຖິ້ມທັງສອງຢ່າງຄື ຄຳສັ່ງສອນອັນປອມແປງ ຂອງຍຸກ ນິຍົມຄວາມຮູ້ສະໄໝມກາງ ແລະການປະນີປະນອມກັບລັດທິຖືຜີທ້ອງຖິ່ນ ອັນໄດ້ແຜ້ວທາງໃຫ້ແກ່ການທັນ ປ່ຽນສາສະໜາອິດສະລາມໃຫ້ທັນສະໄໝມຢ່າງສິ້ນເຊີງ. ການປະຕິຮູບ ເຮັດໃຫ້ເກີດຄວາມນັບຖືຕົນເອງ ແລະໃຫ້ຄຳແນະນຳສຳລັບຍຸກສະໄໝມໃໝ່ ໂດຍບໍ່ຕ້ອງປະຕິເສດເອກະລັກຂອງຜູ້ໃດຜູ້ນຶ່ງ ຄືເສັ້ນທາງນຶ່ງ ເພື່ອໃຫ້ກາຍເປັນຄົນທັນສະໄໝມ ໂດຍທີ່ຍັງເປັນມຸດສະລິມຢູ່. ເລື່ອງນີ້ໄດ້ເຮັດໃຫ້ເກີດການຕໍ່ວ່າຕໍ່ຂານ ຂະ ໜນານໃຫຍ່ ແລະຊຸກຍູ້ໃຫ້ເກີດການຕໍ່ຕ້ານຢ່າງຮຸນແຮງ ຢູ່ໃນສັງຄົມ ເທິງເກາະດອນ ອິນດີສ.

ສັງຄົມອິດສະລາມເຫລົ່ານີ້ ມີຄວາມຫລາກຫລາຍ ແລະຂະບວນການປະຕິຮູບກໍໄດ້ດຳເນີນໄປ ຕາມຮູບແບບທີ່ແຕກຕ່າງກັນໄປຕາມແຕ່ລະທ້ອງຖິ່ນ. ຕົວຢ່າງ ໃນບັນດາປະຊາຄອມມຸດສະລິມເກືອບທັງ ໝົດໃນສຸມາຕຣານັ້ນ ການພັດທະນາຂອງພວກເຂົາ ມີສາຍພົວພັນຮັດແໜ້ນກັບ ຮູບແບບຣັນຕູ (rantau pattern) ອັນເກົ່າແກ່ ແລະມີອຳນາດ. ຣັນຕູ ມີຫລາຍຄວາມໝາຍ: ມັນອາດໝາຍເຖິງຂະບວນການ ທີ່ຫຍັບອອກໄປຮອດຊາຍແດນບ່ອນຕັ້ງຖິ່ນຖານ, ພໍ່ຄ້າຊາວຂາຍ ທີ່ອອກໄປສະແຫວງຫາໂຊກລາບໃນດິນ ແດນຫ່າງໄກ ແລະອາດໝາຍເຖິງຜູ້ຄົນສັນຈອນແຮມທາງໄປໄກເພື່ອສະແຫວງຫາການຮຽນຮູ້ ທາງສາ ສະໜາໃຫ້ເລິກເຊິ່ງຂຶ້ນ. ໃນຄວາມໝາຍທັງໝົດນີ້ ມັນຍັງແມ່ນຄວາມປາຖະໜາ ທີ່ຈະອອກໄປຈາກ ສະຖານະພາບປັດຈຸບັນ ເພື່ອໂອບອຸ້ມເອົາໂອກາດອັນໃໝ່.

ໃນສັງຄົມແບບນີ້ ການປະຕິຮູບອິດສະລາມ ບໍ່ພຽງແຕ່ຕອບສະໜອງໃຫ້ແຕ່ດ້ານແຜນການວຽກ ທົ່ວໄປ ເພື່ອການທັນປ່ຽນມາຫາຄວາມທັນສະໄໝມຂອງມຸດສະລິມ ແຕ່ມັນຍັງໄດ້ສະໜອງຊ່ອງທາງໃໝ່ ອັນກວ້າງຂວາງ ໃຫ້ແກ່ຝ່າຍຣັນໂຕ (rantau drive) ນຳ. ແນວຄຶດກ່ຽວກັບການປະຕິຮູບໄດ້ສະໜອງ ພື້ນຖານສຳລັບຂະບວນການ ຊາວອາເຈະ ໃນຍຸກທັນສະໄໝມ, ຂະບວນການປູຊາ (PUSA:Persatuan Ulama Seluruh) ຫລື ທີ່ໝາຍເຖິງ ສະຫະພາບນັກປາດທາງສາສະໜາ ຊາວອາເຈະທັງໝົດ ຕັ້ງຂຶ້ນ ໃນປີ 1939 ໂດຍ ດອດ ບີວເຣີຊ (Daud Beureueh) ທີ່ປະກອບດ້ວຍ ຄວາມມຸ່ງໝັ້ນອັນເຂັ້ມຂຸ້ນ ປັບປ່ຽນ ເພື່ອປະຕິຮູບ ອິດສະລາມ ຂອງອາເຈະ ແລະເພື່ອປັບປ່ຽນສັງຄົມຊາວອາເຈະທັງໝົດ ໃຫ້ມີພາບພົດ ອັນໃໝ່.

ຂະບວນການປະຕິຮູບ ຍັງໄດ້ຄອບງຳຢູ່ເໜືອຊີວິດຊາວມິນັງກາໂບ ພາຍຫລັງປີ1900 ນຳອີກ, ໂດຍໂຈມຕີປະເພນີ ການຖືສຳຄັນສາຍມາດາ ແລະການປະຕິບັດຮີດຄອງອິດສະລາມຂອງຊາວມິນັງ ກາໂບ ຢ່າງຮຸນແຮງ ຈົນກໍ່ໃຫ້ເກີດການຕອບໂຕ້ຄືນຢ່າງແຂງຂັນນຳ. ຂະບວນການນັ້ນ ໄດ້ຜະຫລິດບຸກຄົນ ຜູ້ມີຊື່ສຽງຫລາຍຄົນ ເຊັ່ນ ນັກຂຽນນະວະນິຍາຍ-ນັກອະພິປາຍ ຊື່ ຮັມກາ ແລະ ຮາຈີ ອາກຸສ ຊາລິມ (Hamka & Haji Agus Salim) ຜູ້ສະໜັບສໜຸນການປະຕິຮູບອິດສະລາມຂັ້ນນຳຂອງຊາດ ຢູ່ໃນ ວົງການເມືອງ ພ້ອມໆກັບຂະບວນການ ປູຊາ (PUSA). ການປະຕິຮູບອິດສະລາມ ແລະຂະບວນການຂອງ ຝ່າຍຣັນຕູ ພຽງແຕ່ຫັນປ່ຽນຢູ່ພາຍໃນ, ແຕ່ໃນໝູ່ພວກມິນັງກາໂບ ໄດ້ເຂົ້າສົມທົບກັບຂະບວນການທີ່ ພວມແຜ່ລາມຢູ່ ຄືຂະບວນການປູກຕົ້ນຢາງພາຣາທີ່ເທ່ົ່ກັບແຮງໃນຍຸກຕົ້ນສະຕະວັດທີຊາວ ແລະຂະບວນ ການອົບພະຍົບຄັ້ງສຳຄັນຂອງພວກດັດຊ໌ ຜູ້ມີການສຶກສາ ເຂົ້າມາສູ່ ບັດຕາເວຽ ແລະເມືອງອື່ນໆໃນຊະວາ.

ຮູບແບບສາສະໜາຂອງຊະວາ ຕ່າງຈາກພວກຢູ່ເທິງດອນສຸມາຕຣາ ຄົນພວກອື່ນໆເທິງດອນນຳ, ດ້ວຍເຫດນັ້ນເອງ, ແນວຄຶດການປະຕິຮູບຈຶ່ງມີບົດບາດຕ່າງ ອອກໄປ. ໂດຍທົ່ວໄປແລ້ວ ຊາວຊະວາທັງໝົດ ນັບຖືສາສະໜາອິດສະລາມ ແຕ່ພາຍໃນຄວາມເປັນ ເອກະພາບນັ້ນ ກໍມີຄວາມແຕກຕ່າງກັນຢູ່ສອງຈຸດ

ເຊິ່ງມີຮາກເຫງົ້າມາແຕ່ສະຕະວັດທີ 16. ຊາວຊະວາ ສ່ວນຫລາຍ ຄືພວກຊາວນາ ແລະຄົນຊັ້ນສູງປຣິຍາຢິ ເປັນພວກອາບັງກັນ (abangan) ໄດ້ຮັບເອົາສາສະ ໜາອິດສະລາມ ດ້ານຄຳສອນ ພ້ອມໆກັບສາສະໜາ ຮິນດູ ພຸດ ຫລື ລັດທິນັບຖືຜີສາງ ເຂົ້າມາຊັບຊ້ອນ ໄວ້ຢ່າງລ້ຳເລິກ ຈົນກາຍເປັນອັນ ທີ່ເອີ້ນວ່າ "ສາສະ ໜາຊາວຊະວາ". ພວກສັນຕຣີ ເຊິ່ງເປັນສ່ວນໜ້ອຍ ຖືວ່າຕົນເປັນມຸດສະລິມຜູ້ເຄັ່ງຄັດຈິງຈັງກວ່າ ໄດ້ວາງ ໂຕແຕກຕ່າງຈາກພວກອາບັງກັນ ໂດຍຮັກສາສິນ ປະຕິບັດຕາມຫລັກການຢ່າງເຄັ່ງຄັດ ເຊັ່ນການ ລະໜາດ ມື້ລະຫ້າເທື່ອ ແລະການອົດອາຫານກັບນ້ຳ ໃນເວລາກາງເວັນ ໃນເດືອນຖືສິນອົດ.

ເຖິງແນວໃດກໍດີ ຊາວຊະວາໃຫ້ຄວາມສຳຄັນແກ່ຄວາມສະໜາມານສາມັກຄີຫລາຍ, ພວກສັນຕຣີ ແລະອາບັງກັນ ຢູ່ຮ່ວມກັນແບບເພື່ອນມິດມາເປັນເວລາຫລາຍສະຕະວັດແລ້ວ. ຍິ່ງໄປກວ່ານີ້ ພວກອາບັງ ກັນ ກໍເປັນມຸດສະລິມ ຄືກັນ ສ່ວນພວກມຸດສະລິມສັນຕຣີເອງ, ຖືວ່າ ອິດສະລາມແມ່ນສາສະໜາຂອງຊາວ ບ້ານ ທີ່ບັນຈຸອົງປະກອບຂອງປວງຊົນຫລາຍຢ່າງ ແຫ່ງຍຸກກ່ອນໆອິດສະລາມ. ແຕ່ວ່າ ຄ້າຍຄືກັບ ຄຸນນະທຳອື່ນໆ ຄວາມສາມະຄີທາງສັງຄົມອັນນີ້ ໄດ້ຖືກທຳລາຍລົງດ້ວຍການສະແຫວງຫາເອກະລັກ ແລະ ບົດບາດໃໝ່ ທາງສັງຄົມ ເມື່ອສະຕະວັດທີ 20 ນີ້ເອງ.

ຂະບວນການຂອງມັນ ເລີ່ມຕົ້ນຂຶ້ນຢ່າງໄວວາ ໃນຕອນທີ່ເງື່ອນໄຂທາງເສດຖະກິດພວມປ່ຽນແປງ ເມື່ອທ້າຍສະຕະວັດທີ 19. ພາຍຫລັງປີ 1870 ເຮືອຈັກອາຍນ້ຳ ໄດ້ເຮັດໃຫ້ພວກສັນຕຣີ ສາມາດເດີນທາງ ໄປສະແຫວງບຸນ ທີ່ເມືອງເມກະ ເປັນຈຳນວນຫລາຍ ແລະເມື່ອກັບມາ ພວກເຂົາກໍພາກັນຮູ້ສຶກວິຕົກຫ່ວງ ໃຍສາສະໜາອິດສະລາມຂອງພວກເຂົາຫລາຍຂຶ້ນ ແລະພາກັນນຸ່ງເຄື່ອງທີ່ດັດແປງໃໝ່ມາຈາກເຄື່ອງ ນຸ່ງອາຣັບ. ເຂດຊຸມນະບົດອັນເປັນບ່ອນທີ່ພວກເຂົາສ່ວນຫລວງຫລາຍໜີອອກມາ ເມື່ອພວກເຂົາຫວນກັບ ຄືນໄປ ໃນຊື່ໃໝ່ວ່າ ຮາຊີ (haji) ແລະມັກໄປຕັ້ງສຳນັກ ເປຊັນເຕຣນ ໃໝ່ຂຶ້ນ ແລະໃນເຂດອ້ອມແອ້ມ ພວກເຂົາ ຊຸມຊົນສັນຕຣີກໍເພີ່ມຈຳນວນຫລາຍຂຶ້ນ ທັງຄວາມສັດທາກໍແກ່ກ້າຂຶ້ນນຳ. ບາງພວກຮັ່ງມີຂຶ້ນ ຄືພວກພໍ່ຄ້າຊົນນະບົດ ພວກຊາວນາທີ່ທ້ອນເງິນເພື່ອເດີນທາງໄປສະແຫວງບຸນ, ພວກຫົວໜ້າສຳນັກ ໃຊ້ ແຮງງານນັກສຶກສາຂອງຕົນໃນທົ່ງນາທີ່ພວກເຂົາຊື້ມ້ຽນໄວ້. ໃນຂະນະທີ່ພວກສັນຕຣີຊົນນະບົດ ຈຳນວນ ຫລາຍ ຍັງຄົງບໍ່ມີຖານະດີຂຶ້ນກວ່າຊາວນາອື່ນໆ, ສິນທຳທີ່ນັບຖືສະສົມກັນມາຂອງກຸ່ມທີ່ເຄັ່ງ ອິດສະລາມ ກໍເລີຍກັບກາຍເປັນຄວາມກຽດຊັງ ຕໍ່ພວກທີ່ມີພາບພົດອາບາກັນ ວ່າພວກສັນຕຣີ ແມ່ນພວກຄົນອາຣັບ ທີ່ຮັ່ງມີຂີ້ຖີ່ ແລະຫນ້າເກງຂາມ. "ຄວາມເຊື່ອທາງສາສະໜາຂອງພວກສັນຕຣີ ໃນຊົນນະບົດ ປ່ຽນແປງ ໄປແດ່ຕາມຂະບວນການ ພວກເຂົາບໍ່ໄດ້ສະແຫວງຫາເອກະລັກໃໝ່ ເທົ່າກັບການຂະຫຍາຍ ຂອບເຂດ ຂອງເອກະລັກເກົ່າ. ແຕ່ສະຕິສຳນຶກກ່ຽວກັບຕົນເອງຂອງພວກເຂົາ ໃນຖານະສະມາຊິກຂອງຊຸມຊົນມຸດ ສະລິມ ອັນແປກຕ່າງໜ່ ໄດ້ກໍ່ໃຫ້ເກີດຜົນສະທ້ອນຢ່າງດຽວກັນກັບພຶດຕິກຳທາງເສດຖະກິດ ຂອງຜູ້ຮັ່ງມີ ກວ່າ ຈຳນວນໜ້ອຍນຶ່ງ. ພວກສັນຕຣີຊົນນະບົດ ເຊິ່ງກໍເປັນກຸ່ມນຶ່ງ ຈຶ່ງຄ່ອຍຖອຍຫ່າງອອກຈາກພວກ ອາບັງກັນ ທີ່ເຄີຍເປັນເພື່ອນມິດກັນ.

ໃນລະຍະຍາວ ຄວາມແຕກໂຕນທີ່ຂະຫຍາຍໃຫຍ່ອອກນີ້ ກໍ່ໃຫ້ເກີດຜົນກະທົບເລິກເຊິ່ງໃນສັງຄົມ ຊົນນະບົດຊະວາ. ລຸນຫລັງປີ 1900 ມັນຂະຫຍາຍຕົວຢ່າງເຂັ້ມຂຸ້ນ ແລະວ່ອງໄວຢູ່ລະຍະນຶ່ງ ເປັນທັງ ຄວາມບາດໜາງເກົ່າ ແລະເລິກຢູ່ພາຍໃນກະໂຕຊຸມຊົນສັນຕຣີຂອງຊະວາເອງ. ຄວາມປ່ຽນແປງທາງ ເສດຖະກິດ ໃນປາຍສະຕະວັດທີ 19 ໄດ້ສົ່ງຜົນສະທ້ອນໃສ່ຊຸມຊົນສັນຕຣີໃນເມືອງ ເລິກເຊິ່ງຍິ່ງກວ່າພວກຢູ່ ຊົນນະບົດ. ພວກພໍ່ຄ້າໃນເມືອງຂະຫຍາຍທຸລະກິດອອກ, ຫຍັບເຂົ້າຫາສາຍອາຊີບໃໝ່. ພວກກຸ່ມສັນຕຣີ ສ້າງໂຮງງານຜ້າພິມບາຕິກ ແລະໂຮງງານຜະຫລິດກອກຢາຢູ່ໃນເມືອງ ເຊັ່ນ ຢູ່ ຢອກຢາກາຕ້າ, ຊູຣາ ກາຕ້າ, ແລະ ກູດູສ. ຢູ່ໃນເມືອງ ພວກເຂົາຮູ້ສຶກຖືກກົດດັນຈາກການແຂ່ງຂັນຊ່ວງເສັ້ງ ກັບພວກຊາວຈີນ, ໃນເວລາດຽວກັນ ພວກເຂົາຜັດໄດ້ເຫັນການປ່ຽນແປງຂອງຊຸມຊົນຊາວຈີນ ແລະຊາວດັດຊ໌ ກ່ອນໜ້ານ. ມາເຖິງປະມານປີ 1900 ຫລາຍຄົນເລີ່ມຮູ້ສຶກວ່າ ມີຄວາມຈຳເປັນທີ່ຈະຕ້ອງມີພາບພົດໃໝ່ຂອງໂລກ

ແລະຕ້ອງມີພວກເຂົາ ຢູ່ໃນນັ້ນ. ແມ່ນພວກເຂົາເອງ ທີ່ຍິນດີອອນຊອນນຳການປະຕິຮູບອິດສະລາມ ແລະ ຮຽກຮ້ອງຫາ ການປະຕິຮູບນັ້ນ ວ່າແມ່ນຂອງພວກເຂົາ.

ພວກສັນຕຣິ ໃນເມືອງສ່ວນຫລາຍ ໂດຍສະເພາະໃນເມືອງໃຫຍ່ໆ ຫັນໄປຫາການປະຕິຮູບອິດສະ ລາມຢ່າງໄວວາ ໃນສອງທົດສະວັດຕົ້ນຂອງສະຕະວັດ. ເມື່ອເຮັດຢ່າງນັ້ນແລ້ວ ພວກເຂົາກໍຕິຕົວອອກຫ່າງ ຈາກການຄ້າຂາຍ ແລະອຸດສາຫະກຳຂະຫນາດນ້ອຍ ຫັນມາປະກອບອາຊີບອັນຫລາກຫລາຍຢູ່ໃນເມືອງ ເຊັ່ນ ເປັນນັກຂ່າວຫນັງສືພິມ ເປັນຄູສອນໃນໂຮງຮຽນ ແລະວຽກງານນັ່ງຢູ່ກັບໂຕະຕັ່ງອື່ນໆ ອັນເປັນການ ປູພື້ນຖານສຳລັບຄວາມເຊື່ອຫມັ້ນໃນຕົວເອງ ໃຫ້ມີຄວາມທັນສະໄຫມ ແລະໂດຍສະເພາະ ສຳລັບຊຸມຊົນ ເມືອງຂອງຊາວມຸດສະລິມ. ລັກສະນະຂອງຊຸມຊົນນັ້ນ ເຫັນໄດ້ຈາກກິດຈະກຳຂອງອົງການຈັດຕັ້ງສຳຄັນໆ ຂອງມັນ ເຊັ່ນ ຊຸມຊົນມູຮາມາດິຍາຫ໌ ຕັ້ງຂຶ້ນໃນປີ 1912 ຢູ່ ຢອກຢາກາຕາ ໄດ້ຈະເລີນເຕີບໃຫຍ່ຢ່າງ ໄວວາໃນທົດສະວັດຕໍ່ໆມາ. ມູຮາມາດິຍາຫ໌ ມີຄວາມທັນສະໄຫມໃນກະໂຕຫາດແທ້ຂອງມັນເອງ ຍ້ອນວ່າ ຊາວ ມຸດສະລິມໃນດອນອິນດີສ ແຕ່ໃດໆມາ ບໍ່ເຄີຍຈັກເທື່ອທີ່ຈະຈັດຕັ້ງຕົນເອງຂຶ້ນເປັນສະມາຄົມແບບມີ ຄະນະອຳນວຍການ ສາຂາ ແລະອື່ນໆອີກ. ອົງການໄດ້ດຳເນີນວຽກງານຂອງຕົນ ຜ່ານການຈັດຕັ້ງອື່ນໆ ເຊັ່ນ ສະມາຄົມຊາວຫນຸ່ມແລະແມ່ຍິງ, ຫ້ອງສຸກສາລາ (ຄລິນິກ) ໂຮງຮຽນເດັກກ່ຳພ້າ ແລະເຫນືອສິ່ງ ອື່ນໃດ ແມ່ນລະບົບໂຮງຮຽນອັນກວ້າງໃຫຍ່ ທີ່ມີວິຊາສອນ ສອດຄ່ອງກັບໂຮງຮຽນສອນພາສາດັດຊ໌ ຂອງລັດຖະບານໃນເວລານັ້ນ ມີການສອນສາສະຫນາອິດສະລາມ ແບບບໍ່ແມ່ນການເລົ່າປາກເປົ່າ ແລະ ແປຄວາມ ເທົ່ານັ້ນ ແຕ່ເປັນລະບົບພື້ນຖານສຳລັບຄວາມເຊື່ອທາງສາສະຫນາ ຈະລິຍະທຳ ແລະສັງຄົມ. ອັນສຳຄັນ ກວ່າຫມູ່ ແມ່ນວ່າ ໃນບໍ່ດົນ ຊຸມຊົນມູຮາມມາດິຍາຫ໌ ກໍຂະຫຍາຍສາຂາຂອງຕົນອອກໄປ ສູ່ເຂດອື່ນໆ ຂອງດອນ ທີ່ບໍ່ແມ່ນຄົນຊະວາຢູ, ຢູ່ໃນສຸມາຕຣາ ແລະແຫ່ງອື່ນໆ. ນັບແຕ່ຕອນຕັ້ງຕົ້ນແລ້ວ ມັນບໍ່ແມ່ນອົງການຈັດຕັ້ງຂອງຊາວຊະວາ ແຕ່ຫາກເປັນຂອງຊາວມຸດສະລິມ ໂດຍສະພາະປະເພດນຶ່ງ, ເອກະລັກໃຫມ່ທີ່ເປັນຕົວຕົນ ປະກອບດ້ວຍຄວາມພິເສດສຸດຍອດຂອງຊົນເຜົ່າ ແລະລັກສະນະຫລາກຫລາຍ ຂອງຮູບແບບ ແປກຕ່າງຕາມທ້ອງຖິ່ນ ຂອງ ອິດສະລາມ ຢູ່ໃນສັງຄົມແຫ່ງເກາະດອນອິນດີສ.

ແນ່ນອນວ່າ ຊຸມຊົນມູຮາມາດິຍາຫ໌ ໄດ້ໄຂປະຕູກວ້າງໃຫ້ແກ່ຄວາມແຕກໂຕນກັນຢູ່ພາຍໃນຊຸມຊົນ ສັນຕຣິຊະວາ ເຊັ່ນໃນ ມີນັງກາໂບ ແລະບ່ອນອື່ນໆທຸກທີ່ທຸກບ່ອນຕາມເມືອງເລັກເມືອງນ້ອຍ ແລະບາງ ເທື່ອ ໃນກະໂຕຊົນນະບົດເອງ ກຸ່ມຄົນນ້ອຍໆ ແຕ່ຫາກຫ້າວຫັນ ມີແນວຄຶດສະໄຫມນິຍົມ ພາກັນໂຈມຕີ ສິ່ງ ທີ່ພວກເຂົາເອີ້ນວ່າ ພິທີກຳອັນໄຮ້ຄວາມຫມາຍ ຂອງການສູດອ່ານຄຳພີກຸຣະອານ ແລະວິທີການຮຽນ ການສອນຕາມປະເພນີ, ພວກເຂົາຍັງຮຽກຮ້ອງໃຫ້ສາສະຫນາອິດສະລາມຂອງຊະວາ ປອດຈາກ "ຄວາມ ເຊື່ອງົມງວາ ທີ່ບໍ່ແມ່ນຄຳສອນອິດສະລາມ". ການໂຈມຕີແບບນີ້ ເປັນການຄຸກຄາມແຕະຕ້ອງເອກະລັກ ຂອງພວກສັນຕຣິຊົນນະບົດ ເປັນເທື່ອທຳອິດ ແລະໂດຍສະເພາະແລ້ວ ເປັນການທ້າທາຍການເປັນຜູ້ນຳ ຂອງສຳນັກເປຊັນເຕຣນ ແລະພວກນັກປາດອາຈານຊາວບ້ານນຳ. ພວກເຂົາຈຶ່ງຕອບໂຕ້ຄືນ ໃນແບບ ດຽວກັນ ໂດຍເອີ້ນພວກຫົວນິຍົມສະໄຫມໃຫມ່ວ່າ ຄຣິດສຕຽນ ແລະພວກປື້ນສາສະຫນາ.

ເຄິ່ງສະຕະວັດຕໍ່ມາ ບາດແຜຈາກສົງຄາມທີ່ລະເບີດຂຶ້ນໃນຕະຫລອດຊຸມປີ1910 ແລະຊຸມປີ 1920 ກໍຍັງບໍ່ທັນໄດ້ປິ່ນປົວຊ່ວງເຊົ່າ. ຕໍ່ມາພວກນິຍົມປະເພນີຫົວຮຸນແຮງ ໄດ້ຕັ້ງໂຮງຮຽນສອນສາສະຫນາ ອິດສະລາມທັນສະໄຫມ ແລະອົງການຈັດຕັ້ງແບບທັນສະໄຫມຂຶ້ນ. ອົງການທຳອິດ ແລະຍິ່ງໃຫຍ່ກວ່າ ຫມູ່ຫມົດ ແມ່ນ ນາດາຕູນ ອູລາມາ (Nahdatul Ulama) ຕັ້ງຂຶ້ນໃນປີ 1926 ເພື່ອໃຊ້ວິທີການຂອງ ພວກຫົວສະໄຫມໃຫມ່ເອງ ຕໍ່ຕ້ານກັບພວກປະເພນີນິຍົມ. ໃນສ່ວນຂອງພວກເຂົາເອງ ພວກຫົວສະໄຫມ ໃຫມ່ໄດ້ຜາກັບປະຖິ້ມ ທັດສະນະຊ້າຍຈັດຂວາໂພດຂອງພວກເຂົາ. ອີກປະການນຶ່ງ ພ້ອມໆກັນນັ້ນ ພວກເຂົາ ກໍຮູ້ສຶກວ່າມີຄວາມ ກົດດັນແຮງຂຶ້ນ ຂອງຂະບວນການໃຫມ່ ໃນຫມູ່ພວກອາບັງກັບທັງສອງ ຄື ທັງຊາວນາ ໃນຊົນນະບົດ ແລະພວກປັນຍາຊົນທີ່ໄດ້ຮັບການສຶກສາແບບດັດຊ໌ໃນຕົວເມືອງ.

ໃນວິທີການສຶກສາທັງຫມົດນັ້ນ ວິທີການຕົ້ນຕໍແບບທີສາມຢູ່ໂຮງຮຽນລັດ ທີ່ສອນພາສາດັດຊ໌ ແມ່ນອັນທີ່ມີຄວາມສຳຄັນສຸດ ເພາະມີຄວາມເລິກເຊິ່ງແລະກວ້າງຂວາງ ໂດຍສະເພາະກ່ຽວກັບການປ່ຽນ ແປງຮູບແບບທີ່ມັນກໍ່ໃຫ້ເກີດ ຢູ່ໃນຫມູ່ປະຊາຊົນ ແຫ່ງເກາະດອນອິນດີສ. ຂັ້ນເລີ່ມຕົ້ນຊັກຊ້າແດ. ໃນສະຕະ ວັດທີ19 ລັດຖະບານໄດ້ພັດທະນາລະບົບການສຶກສາ ທີ່ເຖິງວ່າຈະນ້ອຍແຕ່ກໍມີຄຸນນະພາບສຳລັບພວກຊາດ ເອີຣົບ ຂອງຕົນ, ແຕ່ກ່ອນປີ 1900 ມີຄົນຊົນຊັ້ນສູງຊາວພື້ນເມືອງຈຳນວນນຶ່ງເທົ່ານັ້ນ ເຊັ່ນພວກ ກາຣ໌ຕິນີ (Kartini) ໄດ້ຮັບອະນຸຍາດໃຫ້ເຂົ້າຮຽນໃນໂຮງຮຽນປະຖົມເອີຣົບ. ຈຳນວນນັກຮຽນຫລາຍຂຶ້ນ ໃນປີທີ່ມີ ນະໂຍບາຍກ່ຽວກັບຈະລິຍະທຳ (Ethical Policy) ໃນປີ 1905 ມີ ຮອດ 4,000 ຄົນ, ໃນປີ 1920 ຮອດ 6,000 ຄົນ. ນັກຮຽນທີ່ໄດ້ສິດພິເສດເຫລົ່ານັ້ນ ສ່ວນຫລາຍມາຈາກຊົນຊັ້ນສູງຂອງທ້ອງຖິ່ນ ໃນສັງຄົມ ອິນດີສ໌ ແລະກໍຍັງຫລາຍກວ່າຫມູ່ ເມື່ອທຽບກັບຊາວພື້ນເມືອງ ທີ່ໄປຮຽນຕໍ່ຊັ້ນມັດທະຍົມ ແລະວິທະ ຍາໄລ ແບບເອີຣົບ (ໂຮງຮຽນການຊ່າງ ປີ1920; ໂຮງຮຽນກົດຫມາຍ ປີ 1924; ໂຮງຮຽນການແພດ ປີ 1927) ຫລື ບໍ່ກໍໄປຮຽນຕໍ່ທີ່ ໂຮລັງ.

ໃນຂະນະດຽວກັນ ພ້ອມໆກັບລະບົບໂຮງຮຽນແບບເອີຣົບ-ເຊິ່ງໃນຂັ້ນຕົ້ນ ເຈາະຈົງວ່າຈະໃຫ້ແຕ່ ພວກດັດຊ໌ເອງເທົ່ານັ້ນເຂົ້າຮຽນ - ກໍໄດ້ມີລະບົບໂຮງຮຽນພື້ນເມືອງລັດຖະບານຕ່າງຫາກທີ່ພວມເຕີບໃຫຍ່ ຄຽງຄູ່ກັນ. ໂຮງຮຽນພື້ນເມືອງ ໃນສະຕະວັດທີ19 ໂຮມທັງສ່ວນຫລາຍ ໂຮງຮຽນຂັ້ນບ້ານ ທີ່ເປີດກວ້າງ ຂະຫຍາຍຕົວລຸນຫລັງປີ 1907 ໃຊ້ພາສາທ້ອງຖິ່ນເປັນສື່ການສອນ ແລະຍ້ອນເຫດນັ້ນ ຈຶ່ງມີຜົນສະທ້ອນຕໍ່ ວັດທະນະທຳພຽງແຕ່ຫນ້ອຍດຽວ. ແຕ່ໂຮງຮຽນ "ດອກຕີຊະວາ" (Dokter Djawa) ກໍຍັງໃຊ້ພາສາ ດັດຊ໌ ສອນລຸນຫລັງປີ 1875 ເປັນຕົ້ນມາ ກໍຕັ້ງຂຶ້ນທັນເວລາພໍດີ ເພື່ອກໍ່ສ້າງ "ແພດຫມໍ ທ້ອງຖິ່ນ" ຜູ້ຜ່ານ ການຝຶກອົບຮົມຢ່າງສົມບູນພໍສົມຄວນ. ດ້ວຍເຫດນີ້ ນັກສຶກສາບໍ່ເທົ່າໃດຮ້ອຍຄົນຈຶ່ງ ມີບົດບາດຢ່າງບໍ່ສົມ ສ່ວນເທົ່າໃດຢູ່ໃນຂະບວນການເມືອງ ແລະວັດທະນະທຳ ໃນສອງທົດສະວັດທຳອິດຂອງສະຕະວັດທີຊາວ. ເຖິງແນວໃດກໍດີ ມາຮອດລຸນຫລັງປີ 1900 ພີ ລະບົບໂຮງຮຽນພື້ນເມືອງຂອງລັດ ທີ່ສອນພາສາ ດັດຊ໌ ຈຶ່ງໄດ້ຂະຫຍາຍໂຕຢ່າງແທ້ຈິງ.ລະຫວ່າງປີ 1907 ແລະ 1914 ໂຮງຮຽນຂັ້ນປະຖົມ ພື້ນເມືອງທີ່ມີ ຢູ່ແລ້ວ ໄດ້ປັບປ່ຽນມາເປັນໂຮງຮຽນພື້ນເມືອງດັດຊ໌ (Ducht Native School/DNS) ເຊິ່ງໄດ້ສະຫນອງ ການສຶກ ສາຂັ້ນປະຖົມ ໃຫ້ແກ່ຊາວພື້ນເມືອງເປັນພາສາດັດຊ໌ທັງຫມົດ. ໃນລະຫວ່າງປີຕໍ່ມາ ຕາຫນ່າງຂອງໂຮງ ຮຽນໃຫມ່ ຖືກກໍ່ສ້າງຂຶ້ນເຫນືອພື້ນທີ່ຂອງໂຮງຮຽນພື້ນເມືອງເກົ່າ (DNS) ເພື່ອຕອບສະຫນອງການສຶກ ສາລະດັບສູງກວ່າໃຫ້ແກ່ຊາວພື້ນເມືອງຈຳນວນຫນ້ອຍດຽວ ແລະເຊື່ອມຕໍ່ເສັ້ນທາງໄປສູ່ການຝຶກອົບຮົມ ລະດັບສູງ ຢູ່ໃນລະບົບໂຮງຮຽນເທົ່າທຽມກັບຂອງເອີຣົບ. ແຕ່ກໍຍັງເປັນໂຮງຮຽນພື້ນເມືອງດັດຊ໌ ຂອງລັດ ຖະບານທີ່ມີນັກຮຽນ 20,000 ຄົນ ໃນປີ 1915, ແລະ 45,000 ຄົນ ໃນປີ 1940 ຢູ່ນັ້ນເອງ, ແລະບາງທີ ອາດຈະເປັນສະຖາບັນສຳຄັນສຸດແຫ່ງດຽວໃນຍຸກສະຕະວັດທີຊາວ ແຫ່ງປະຫວັດສາດຂອງອິນດີສ ກໍເປັນ ໄດ້.

ການສຶກສາທາງໂລກດ້ວຍພາສາດັດຊ໌ ໄດ້ສົ່ງຜົນສະທ້ອນຢ້ອນຫລັງຫລາຍແນວ ອັນຈະແຈ້ງ ແມ່ນການສຶກສາແບບນັ້ນ ໄດ້ໄຂເສັ້ນທາງສຳລັບການເຄື່ອນເຫນັງທາງສັງຄົມ ເຂົ້າສູ່ຖານະລາຊະການ ພົນລະເຮືອນຢູ່ໃນເມືອງ, ເປັນພະນັກງານຂອງລັດ, ເປັນຄູສອນ, ພະນັກງານທ້ອງການ ໃນທຸລະກິດພາກ ເອກະຊົນ ເປັນນັກຫນັງສືພິມ, ນັກກົດຫມາຍ ແລະແພດຫມໍ. ນອກຈາກນີ້ ການສຶກສານັ້ນ ຍັງໃຫ້ເກນ ຕັດສິນສຳລັບ ສະຖານະພາບທາງສັງຄົມໃຫມ່ ເຊິ່ງມີຜົນດີຫລາຍຂຶ້ນສອງຕໍ່. ອັນທີນຶ່ງ ການສຶກສາແບບ ດັດຊ໌ ຊ່ອຍໃຫ້ຄົນທີ່ມີການສຶກສາແບບນັ້ນ ມີຕຳແຫນ່ງສູງກວ່າຜູ້ທີ່ບໍ່ໄດ້ມີການສຶກສາແບບນັ້ນ, ຜູ້ສຳເລັດ ການສຶກສາຈາກລະບົບເອີຣົບ ຊຶ່ງມີຢູ່ເຫນືອກວ່າຜູ້ຮຽນຈາກລະບົບພື້ນເມືອງ ແລະທີ່ຢູ່ສູງກວ່າຫມູ່ຫມົດ ກໍແມ່ນພວກທີ່ສຳເລັດການສຶກສາຊັ້ນສູງຈາກເນເທີແລນ ຈຳນວນຢີບມືດຽວ. ນັບວ່າເປັນການຄິດໄລ ຈັດ ວາງລຳດັບຊັ້ນແບບໃຫມ່ທີ່ງ່າຍດາຍເຮັດໃຫ້ພວກມີລະດັບຕ່ຳຢູ່ແລ້ວ ຕົກຢູ່ໃນຖານະອັນເຈັບຊ້ຳ ທັງປະ ປ່ອຍພວກຊາວນາ ໄວ້ນອກລະບົບ ຢ່າງຂາດຂັ້ນເລີຍ. ອີກດ້ານນຶ່ງ ມາດຕະການນີ້ ທ້າທາຍຕໍ່ການ

ຈັດແບ່ງສະຖານະພາບແບບເກົ່າ ເຊິ່ງສ່ວນຫລາຍອີງໃສ່ຊາດກຳເນີດຂອງແຕ່ລະສັງຄົມພື້ນເມືອງ ເປັນພື້ນຖານ. ພະນັກງານປຣິຍາຍິຊັ້ນຕ່ຳໆ ຜູ້ທີ່ມີການສຶກສາທີ່ວ່າດີເທົ່າໆ ຫລືວ່າ ດີກວ່າ ຜູ້ທີ່ເຮັດວຽກຕາມການສືບທອດ ພົບຄວາມຫຍຸ້ງຍາກໃຈ ຫລື ບໍ່ພໍໃຈທີ່ຈະໃຊ້ຄຳສັບສູງໃນພາສາຊະວາ ເວລາເວົ້າຈາກັບພວກເພິ່ນ ໃຫ້ຖືກຕ້ອງຕາມສະຖານະພາບທາງປະເພນີ. ດັ່ງນັ້ນ ເບິ່ງໃນຕົວຈິງແລ້ວ ຂະບວນການສະໄໝໃໝ່ທັງຫມົດ ໃນຍຸກຕົ້ນສະຕະວັດທີຊາວ ມີລັກສະນະຕໍ່ຕ້ານ "ສັກດິນາ" ຢ່າງແຮງ. ດ້ວຍສັນຍະລັກດຽວກັນນີ້ ມາດຕະການຕັດສິນໃໝ່ ໄດ້ຕັ້ງຄຳຖາມຕິ່ມຂຶ້ນເລື້ອຍໆກ່ຽວກັບສະຖານະພາບ ອັນສູງສົ່ງທີ່ພວກດັດຊ໌ໄດ້ຮັບສືບທອດ ຕາມສີຜິວຂອງພວກຕົນ. ວິສະວະກອນ ຊູກາຣ໌ໂນ ໄດ້ຮັບການສຶກສາ ມາຢ່າງດີເທົ່າໆກັບທ່ານຂ້າຫລວງໃຫຍ່ ທີ່ເປັນນັກກົດຫມາຍຜູ່ສັ່ງເນລະເທດ ຊູກາຣ໌ໂນ ໃນປີ 1933, ແຕ່ເພິ່ນກໍ່ບໍ່ສາມາດຢູ່ໃນຕຳແໜ່ງ ນັ້ນໄດ້. ໃນທີ່ສຸດ ການສຶກສາແບບດັດຊ໌ ກໍໄດ້ເປີດເສັ້ນທາງອັນງ່າຍດາຍ ໃຫ້ແກ່ການພິສູດຄວາມເປັນຈິງດ້ວຍຕົນເອງ ໃນເລື່ອງວິທະຍາສາດສະໄໝໃໝ່, ເລື່ອງຄວາມຂັດແຍ່ງດ້ານທັດສະນະວິໄສທາງການເມືອງ ເລື່ອງທີ່ວ່າ ໂຮງຮຽນທັງຫມົດທີ່ສອນວັນນະຄະດີນັ້ນ ບໍ່ຈຳເປັນຕ້ອງດີກວ່າຫມູ ແຕ່ຫາກແຕກຕ່າງກັນ ແລະກະຕຸ້ນໃຫ້ເປັນຕາຮຽນຫລາຍກວ່າ. ເລິກໄປກວ່ານັ້ນ ການຄົ້ນຄິດເປັນພາສາຕ່າງປະເທດ ຄືທີ່ຫລາຍພັນຄົນໄດ້ເຮັດມາແລ້ວນັ້ນ ບັງຄັບໃຫ້ຄິດແບບເລຂາຄະນິດ ຂອງພາສາໃນສິ່ງທີ່ພວກເຂົາຄິດຫາຢູ່.

ປະສົບການ ແຫ່ງການປ່ຽນແປງເຫລົ່ານີ້ ໄດ້ກຳນົດຮູບແບບຂອງຄົນກຸ່ມໃໝ່ກຸ່ມນຶ່ງ ທັງທາງດ້ານສັງຄົມ ແລະວັດທະນະທຳ ທີ່ພົ້ນໂຜ່ຂຶ້ນຢູ່ໃນດອນອິນດີສ ເມື່ອຕົ້ນສະຕະວັດທີຊາວ ຄືພວກປັນຍາຊົນຄະລຶຫັດ ໃນເມືອງທີ່ເປັນຊາວພື້ນເມືອງໂດຍກຳເນີດ. ແຕ່ປະສົບການດ້ານການສຶກສາແບບນັ້ນ ບໍ່ໄດ້ສະຫນອງເອກະລັກໃໝ່ອັນໃດ ດ້ວຍກະໂຕມັນເອງໃຫ້ແກ່ພວກເຂົາ. ມັນຫມາຍຄວາມວ່າພວກເຂົາບໍ່ໄດ້ເປັນຊາວ ບູກິດສ໌ ມິນັງກາໂບ ຫລື ຊະວາ ອີກແລ້ວ ເຖິງແມ່ນວ່າ ພວກເຂົາຍັງສືບຕໍ່ໃຊ້ຄວາມຄຶດເປັນພາສາເຫລົ່ານັ້ນອີກຢູ່. ຕາມຫລັກຖານທີ່ປາກົດຢູ່ໃນຫມູ່ດອນອິນດີສນີ້ ມີການຈຳແນກເຜົ່າພັນເຊື້ອຊາດ ບໍ່ວ່າຈະປັນ ຄົນດັດຊ໌ ຫລື ລູກຊອດຝຣັ່ງອາຊີ ຫລື ເປຣານາກັນ-ຈີນ ທັງໆທີ່ພວກເຂົາໃຊ້ພາສາຮ່ວມກັນ ຢ່າງຫນ້ອຍ ກໍພາສານຶ່ງ ຫລື ຫລາຍໆພາສາກໍມີ. ຖານະຂອງພວກເຂົາ ກໍ່ໃຫ້ເກີດ ຄວາມພະຍາຍາມສ້າງເອກະລັກໃໝ່ ເປັນລະຍະໆ ໃນຕົ້ນຊຸມທັດສະວັດທຳອິດແຫ່ງສະຕະວັດນີ້. ຕາມເດີມແລ້ວ ການສະແຫວງຫານີ້ ບໍ່ໄດ້ມີຕົ້ນຕໍທາງການເມືອງ ແຕ່ການເມືອງແຫ່ງຍຸກນັ້ນ ຖືກກຳນົດຢ່າງກວ້າງໆ ໂດຍການສະແຫວງຫາອັນນັ້ນ.

ເສັ້ນທາງນຶ່ງ ທີ່ຄົນຫລາຍໆຮຸ່ນໄດ້ບຸກເບີກມາແລ້ວ ແມ່ນເສັ້ນທາງແຫ່ງການກຳນົດເອກະລັກປະຈຳເຜົ່າ ຕາມພື້ນຖານສະໄໝໃໝ່. ໃນບັນດາການຈັດຕັ້ງທັງຫລາຍ ອົງການທຳອິດ ແລະສຳຄັນກວ່າຫມູ ທີ່ກໍ່ຕັ້ງຂຶ້ນບົນພື້ນຖານນີ້ແມ່ນ ບູດິ ອູໂຕໂມ (Budi Utomo) ສ້າງຕັ້ງຂຶ້ນໃນປີ 1908 ຕາມຄວາມຄຶດປະດິດສ້າງ ຂອງນັກສຶກສາຊະວາ ໃນໂຮງຮຽນ "ດອກເຕີ ດະຈະວາ" (Dokter Djawa). ຕະຫລອດເວລາ 27 ປີ ແຫ່ງ ການດຳເນີນງານຂອງອົງການ ບູດິ ອູໂຕໂມ ຍືນຢັດຢູ່ຂ້າງຄວາມພະຍາຍາມຂອງພວກຊະວາ ປຣິຍາຍິ ຜູ້ມີການສຶກສາແບບດັດຊ໌ ເພື່ອກໍ່ສ້າງພື້ນຖານໃຫ້ແກ່ວັດທະນະທຳຊະວາ ເຊິ່ງພວກເຂົາວາງພື້ນຖານອີງໃສ ສຳລັບຮອງຮັບຄວາມໝັ້ນໃຈຢ່າງຫນັກແໜ້ນກວ່າເກົ່າ ແລະຈາກນັ້ນ ພວກເຂົາ ກໍຈຶ່ງສາມາດຮຽກຮ້ອງ ຫລາຍຂຶ້ນໃນເລື່ອງທຸລະກິດ. ແຕ່ຄວາມຫຍຸ້ງຍາກທີ່ເຊື່ອງຊ້ອນຢູ່ໃນໂຄງການນີ້ ສະທ້ອນໃຫ້ເຫັນໃນປະຫວັດສາດອັນສັບສົນ ສະແດງອອກໃນຄວາມຫຍຸ້ງຍາກ ໃນການຕັດສິນໃຈ ເພື່ອເລືອກລະຫວ່າງ ແຜນງານດ້ານວັດທະນະທຳອ້ອຍຕ້ອຍ ກັບການທົດລອງດ້ານການເມືອງແບບຕ່າງໆ. ບູດິອູໂຕໂມ ມີທ່າທີຜ່ອນຜັນ ຍ້ອນວ່າສະມາຊິກທັງຫລາຍທີ່ເປັນພວກປຣິຍາຍິຂອງຕົນ ລັງເລໃຈທີ່ຈະກ້າວໄປໄກໆ ໂດຍປະຖິ້ມວັດທະນະດັ້ງເດີມຂອງຕົນ ເຊິ່ງເມື່ອສົມທົບເຂົ້າກັບສິ່ງອື່ນໆແລ້ວ ກໍແມ່ນສິ່ງທີ່ຮັບປະກັນສະຖານະພາບ ອັນສູງສົ່ງຂອງພວກເຂົານັ້ນເອງ ຫລາຍເທື່ອ ບູດິ ອູໂຕໂມ ສະແດງຄວາມບໍ່ແນ່ໃຈ ໃນການກຳນົດເອກະລັກ ທີ່ອົງການຂອງຕົນເປັນຕົວແທນ ດັ່ງນັ້ນ ຈຶ່ງມີການເວົ້າເຖິງ "ຊະ

ວາໃຫຍ່" ເລື້ອຍໆ ອັນເປັນຄວາມສຳນຶກທີ່ພວກຊູດາບ ກັບ ມາດູຣາ ເຫັນວ່າ ບໍ່ຫນ້າສົນໃຈ ຈັກຫນ້ອຍ ເລີຍ.

ເມື່ອເບິ່ງທຸກດ້ານທຸກມຸມແລ້ວ ບູດິ ອູໂຕໂມ ແມ່ນຕົວແບບຂອງບັນດາອົງການຈັດຕັ້ງຈຳນວນ ຫລວງຫລາຍ ຄ້າຍຄືກັນນີ້ ທີ່ຕັ້ງຂຶ້ນໂດຍກຸ່ມຊົນເຜົ່າຕ່າງໆໃນຊຸມປີ 1910. ອົງການນັກສຶກສາຫລາຍ ແຫ່ງ ທີ່ກໍ່ຕັ້ງຂຶ້ນຕາມພາຍຫລັງ ມີທ່າອຽງເຄື່ອນໄຫວຮຸນແຮງກວ່າ. ເປັນທີ່ຮູ້ກັນວ່າ ໃນຂະນະທີ່ນັກສຶກ ສາເຫລົ່ານັ້ນ ດຳເນີນການຈັດຕັ້ງໄປຕາມສາຍຊົນເຜົ່ານັ້ນ, ຊື່ຂອງພວກເຂົາສ່ວນຫລາຍ ມັກຕັ້ງຕົ້ນດ້ວຍ ຄຳ ໃນພາສາດັດຊ໌ ວ່າ "ຈອງ" (Jong/ຫນຸ່ມ), ອັນເປັນສັນຍະລັກຂອງເສົາຫລັກຂອງທາງແບ່ງດ້ານ ວັດທະນະທຳ ແລະການເມືອງ ເຊັ່ນ ຈອງ ຊະວາ, ຈອງ ສຸມາຕຣາເໜນ ບອນດ໌, ຈອງ ມິນາຮາຊຊາ, ຈອງ ເຊເລ ເບຊ, ໃນເວລາດຽວກັນ ອົງການ ຈອງ ອິດສະລາມິເຕນ ບອນດ໌ ໃນຍຸກດຽວກັນ ເປັນຕົວແທນ ໃຫ້ແກ ຄວາມນຶກຄິດເລື່ອງການປະຕິຮູບມຸດສະລິມຂອງພວກດັດຊ໌ຜູ້ມີການສຶກສາ.

ພັກການເມືອງຂອງພວກອິນດີສ ແລະອົງການສືບທອດ ເປັນຕົວແທນຂອງເສັ້ນທາງ ເສັ້ນທີສອງ ທີ່ບຸກເບີກແລ້ວ ໂດຍຜູ້ມີການສຶກສາຈາກໂຮງຮຽນດັດຊ໌ ຈຳນວນນຶ່ງ. ສະມາຊິກສຳຄັນສອງຄົນຂອງກຸ່ມ ປັນຍາຊົນ ສຸວາຣະດີ ສູຣະຍະນິງຄະຣັດ ແລະ ຕະຈິປໂຕ ມັງກຸນກຸສຸໂມ (Suwardi Suryaningrat & Tjipto Mangunkusumo) ເປັນຜູ້ຕັ້ງແຮກກໍ່ຕັ້ງພັກ ມີບົດບາດສຳຄັນໃນລະຍະຕົ້ນ. ມີພວກທີ່ບໍ່ແມ່ນລູກຊອດ ຝຣັ່ງອາຊີ ອື່ນໆອີກສອງສາມຄົນ ເຄີຍເຂົ້າຮ່ວມກັບພັກ ແຕ່ກໍໄດ້ສ້າງອິດທິພົນໄວ້ຫລາຍ ຍ້ອນວ່າ ໃນຂະນະທີ່ອົງການອື່ນໆ ກຳລັງເວົ້າເຖິງການປັບປຸງຕົນເອງ ແລະສິດໃນການປົກຄອງຕົນເອງໃນລະດັບສູງ ກວ່າຢູ່ນັ້ນ, ພັກ ຊ້ຳສະແດງຢ່າງກ້າຫານ ດ້ວຍການຮຽກຮ້ອງໃຫ້ຍຸຕິການປົກຄອງຂອງພວກດັດຊ໌ລົງ. ໂອ ກາດອັນສຸດທ້າຍສຳລັບພວກລູກຊອດຝຣັ່ງອາຊີ ເພື່ອໜີຈາກສະຖານະພາບອັນດັບສອງທາງວັດທະນະ ທຳ ແລະການເມືອງນັ້ນ ໃນຕົວຈິງ ສຳລັບຊາວຊະວາກັບຜູ້ອື່ນໆ ມັນແມ່ນໂອກາດອັນທີນຶ່ງ ເພື່ອທົດລອງ ກັບເອກະລັກທາງການເມືອງຂອງພວກເຂົາ. ລັດທິຊາດນິຍົມ "ອິນດີສ" ເຊິ່ງ ກວມເອົາທັງພວກລູກຊອດ ຝຣັ່ງອາຊີ, ພວກດັດຊ໌ລບີຊ໌ເວຣ ທີ່ຄຶດວ່າ ອິນດີສ ເປັນບ້ານເກີດຂອງພວກເຂົາ ແລະພວກລູກຊອດຈີນ ເປຣານາກັນ, ຄົງຕົວຢູ່ບໍ່ໄດ້ດົນ, ແຕ່ຄວາມຄຶດກ່ຽວກັບຊາດນິຍົມ ຍັງສືບຕໍ່ຄົງຕົວຢູ່.

ບໍ່ຄືກັບພັກອິນດີສ ຫລື ສະມາຄົມຂອງເຜົ່າຕ່າງໆ ເຊັ່ນ ບູດິ ອູໂຕໂມ(Budi Utomo) ສະຫະພາບ ຊາເຣກັຕ ອິດສະລາມ (Sarekat Islam Union) ບໍ່ໄດ້ຢຶນຢັດເພື່ອເອກະລັກອັນນຶ່ງອັນໃດ ເຖິງວ່າຈະ ນິຍາມກັນແບບກວ້າງໆກໍຕາມ. ຄວາມສຳຄັນຂອງ ຊາເຣກັຕ ອິດສະລາມ ຊ້ຳກົງກັນຂ້າມອ້ອຍຕ້ອຍ. ອົງການນີ້ ແມ່ນຂະບວນການມະຫາຊົນແຫ່ງທຳອິດໃນປະຫວັດສາດຂອງ ດອນອິນດີສ (ແຫ່ງດຽວເທົ່າ ນັ້ນ ເມື່ອກ່ອນປີ 1945) ໃນລະຍະເຄື່ອນໄຫວຢູ່ສິບສີ່ປີຂອງຕົນ, ໄດ້ຂຶ້ນທະບຽນເອົາກຸ່ມທີ່ຈູງໃຈທີ່ສຸດທຸກແບບ ມາຢູ່ພາຍໃຕ້ຄັນທຸງຂອງຕົນ. ຄວາມສັບສົນ ແລະຄວາມຕຶ່ນເຕັ້ນ ອັນຫນ້າອັດສະຈັນ ຂອງການດຳເນີນ ງານຂອງອົງການ ສອງແສງໃຫ້ເຫັນຄວາມສັບສົນ ແລະວິນຍານອັນກ້າເປັນກ້າຕາຍ ຂອງຍຸກສະໄໝ.

ສະຫະພາບ ຊາເຣກັຕ ອິດສະລາມ ຕັ້ງຂຶ້ນໃນປີ1912 ປີດຽວກັນກັບ ມູຮາມາດິຍາ (Muhammadiyah) ແລະຕັ້ງຂຶ້ນໂດຍສະມາຊິກຊົນສັງຄົມກຸ່ມດຽວກັນຄື ພວກນັກປະຕິຮູບສັນຕຣີໃນ ເມືອງ. ທັງສອງໄດ້ ຮັບອິດທິພົນຈາກກະແສການເມືອງໃຫມ່ ທີ່ພັດຜ່ານຊຸມຊົນຈີນ ເມື່ອລາຊະວົງແມນຈູ ຫລົ້ມຈົມລົງໃນປີ 1911 ພວກຊົນຊັ້ນສູງ (ສັນຕຣີ) ໃນເມືອງ ຜູ້ມີຄວາມໃກ້ຊິດຕິດຕໍ່ກັບຈີນ ຮູ້ສຶກເຖິງການຄຸກຄາມຂົ່ມຂູ່ ແລະພ້ອມດຽວ ກໍກະຕຸກຄວາມຮູ້ສຶກທີ່ພວມກໍ່ຕົວຂຶ້ນ ໃນເລື່ອງຊຸມຊົນ ຂອງພວກເຂົາ. ແຕ່ໃນ ຂະນະທີ່ ມຸຮາມມາ ດິຍາຫ໌ ຢືນຢັດ ຢູ່ຄຽງຂ້າງຜົນປະໂຫຍດທາງສາສະຫນາຂອງພວກສັນຕຣີ ເຊັ່ນນີ້ ສະຫະພາບ ຊາເຣກັຕ ອິດສະລາມ ທີ່ຕັ້ງຂຶ້ນໂດຍ ຣາຈິ ສະມານະຮຸດີ ພໍ່ຄ້າຜ້າພິມບາຕິກ ຜູ້ມີຊື່ສຽງຢູ່ ສຣະກາຕາຣ໌ ຊ້ຳຢືນຢັດຢູ່ຄຽງຂ້າງຜົນປະໂຫຍດທາງເສດຖະກິດ ໃນລະຍະທີ່ຄວາມກົດດັນຈາກພວກ ພໍ່ຄ້າຂາຍສິ່ງ ແລະຄູ່ຕໍ່ສູ້ຊາວຈີນ ພວມແຮງຂຶ້ນໆ. ແຕ ຊາເຣກັຕ ອິດສະລາມ ກໍບໍ່ໄດ້ຈຳກັດຕົນເອງ ຢູ່ກັບຈຸດໝາຍທາງ ເສດຖະກິດອັນດັ້ງເດີມນັ້ນອີກຕໍ່ໄປ ແລະບໍ່ຈຳກັດຢູ່ກັບກຸ່ມສັງຄົມໃດນຶ່ງ ໂດຍສະເພາະທີ່ຈຸດ ໝາຍເຫລົ່ານັ້ນ

ຮັບໃຊ້ພວກເຂົາຢູ່. ຢູ່ທີ່ດອນ ມຸດສະລິມຊະວາ ແລະຫມູ່ດອນອິນດີສ ທີ່ມີມຸດສະລິມ ຢູ່ຫລາຍກວ່າ, ສະຫະພາບເຊຮາກັຕ ແມ່ນສຽງຮ້ອງຄາງຂອງຝູງຊົນ ທີ່ຮຽກຮ້ອງໃຫ້ມີຂະບວນການ ກວ້າງຂວາງກວ່າ ເພື່ອການປ່ຽນແປງ. ອົງການດຶງດູດເອົາສະມາຊິກຂອງກຸ່ມທີສອງໄດ້ຢ່າງໄວວາ ໂດຍບໍ່ສ້າງຜົນກະທົບຕໍ່ຊົນຊັ້ນປັນຍາຊົນ ເຊິ່ງໃນພາຍໃນປີດຽວ ກໍຍາດແຍ່ງເອົາການຊີ້ນຳໄດ້. ຜູ້ສຳຄັນ ກວ່າຫມູ ກໍແມ່ນ ອູມາຣ໌ ເຊຄ ຕະໂຈໂກຣມິໂນໂຕ (Umar Said Tjokroaminoto) ທີ່ເປັນປຣິຍາຍິ ຜູ້ມີການສຶກສາແບບດັດຊ໌ ທັງເປັນນັກປາຖິກ ສຳນວນດຸເດືອດ ທີ່ຮັບຜິດຊອບໃນເລື່ອງມະຫາຊົນ ພາຍຫລັງທີ່ສະຫະພາບ ຊາເຣກັຕ ຍາດໄດ້ໄຊຊະນະ.

ບໍ່ດົນ ອີກສອງກຸ່ມສຳຄັນກໍພົ້ນຂຶ້ນ ພາຍໃຕ້ການນຳຂອງອົງການ. ກຸ່ມນຶ່ງອ່າວນ້ອຍ ເປັນຂອງພວກມຸດສະລິມຫົວປະຕິຮູບ ທີ່ມີການສຶກສາແບບດັດຊ໌ ນຳພາໂດຍ ຮາຊີ ອະກູສ ຊາລິມ (Haji Agus Salim) ຜູ້ກາຍເປັນມືຂວາຂອງ ຕະໂຈໂກຣອະມິໂນໂຕ (Tjokroaminoto) ແລະເປັນຜູ້ນຳຂອງການຈັດຕັ້ງປົກ ມຸດສະລິມ ໂດຍສະເພາະ. ອີກພວກນຶ່ງ ເປັນຂອງນັກສັງຄົມນິຍົມ ເຊິ່ງກໍນ້ອຍຄືກັນ ແຕ່ມີຄວາມສາມາດ. ພວກອົບພະຍົບໂຕະຕົກດັດຊ໌ ຈຳນວນຫນ້ອຍນຶ່ງໄດ້ຕັ້ງ "ສະມາຄົມສັງຄົມປະຊາທິປະໄຕແຫ່ງອິນດີສ" (Indies Social - Demaocratic Association ISDA) ຢູ່ ດອນເຊມາຣັງ ເມື່ອປີ 1914 ແລະ ທັດສະນະຂອງພວກເຂົາເປັນແບບຕາເວັນຕົກ ແຕ່ຕໍ່ຕ້ານລັດທິອານານິຄົມແລະທຶນນິຍົມ, ພວກນີ້ມີອິດທິພົນເຫນືອພວກຊະວາຜູ້ມີການສຶກສາແບບດັດຊ໌ ແລະຜູ້ອື່ນໆ ໃນຖານະນັກປະຕິຮູບຄຳສອນ ແບບຄຳພີຕາຍຕົວ ຈາກໄຄໂຣ ທີ່ມີຕໍ່ພວກສັນຕຣີໃນເມືອງ. ຊາວຊະວາບາງຄົນ ເຊັ່ນ ອາລິມິນ ປຣະເວຽໂຣດັຊໂຈ (Alimin Prawirodirdjo), ດາຣ໌ຊາຣໂນ ແລະເຊມວນ (Darsono &Semuan) ແລະພະນັກງານທາງລົດໄຟຫນຸ່ມຄົນນຶ່ງ ເຊມວນ ໄດ້ເຂົ້າຮ່ວມກັບພັກ ISDA ເຊມະ ກັບຜູ້ອື່ນໆ ຢູ່ໃນປົກຫົວຮຸນແຮງ ເປັນຜູ້ທ້າວທັນ ຂອງຂະບວນການສະຫະພັນການຄ້າ ທີ່ກຳລັງເຕີບໃຫຍ່ຂຶ້ນ ໃນທ້າຍຊຸມປີ 1910. ຈາກຣາກຖານທາງການຈັດຕັ້ງອັນນີ້ ການເຣັດວຽກສ່ວນໃຫຍ່ ຜ່ານສາຂາຂອງ ຊາເຣກັຕ ອິດສະລາມ ຢູ່ ເຊມາຣັງ ພວກເຂົາມາສະແດງບົດບາດທີ່ສຳຄັນຫລາຍຂຶ້ນ ຢູ່ໃນສະຫະພັນ SI ສູນກາງພາຍຫລັງປີ 1916.

ຂະບວນມະຫາຊົນສາວົກ ຂອງສະຫະພາບ ເຊເຣກັຕ ອິສະລາມ ທີ່ໄດ້ເປັນຕົວດຶງດູດຄົນເຫລ່ານັ້ນ ແລະທັງຜູ້ອື່ນໆທີ່ມັກເປັນກຸ່ມປ້ອງກັນ ໃຫ້ເຂົ້າມາສູ່ການນຳພາຂອງສະຫະພັນນັ້ນ ບໍ່ໄດ້ຖືກສ້າງຂຶ້ນໂດຍຄວາມພະຍາຍາມຂອງພວກເຂົາເອງ. ກົງກັນຂ້າມ ມັນຂະຫຍາຍຕົວມາຈາກການປະສານສອດແບບແປກປະຫລາດອັນນຶ່ງ ຂອງສາມອົງປະກອບຄື: ນະໂຍບາຍຂອງລັດຖະບານ, ຄວາມຮູ້ສຶກມີປົມດ້ອຍຂອງຊາວບ້ານ ແລະສະຫະພາບຊາເຣກັຕ ອິດສະລາມ ເຊິ່ງປະຕິບັດການແບບບໍ່ແມ່ນອົງການຈັດຕັ້ງທີ່ມີແຜນງານ ແຕ່ຫາກເປັນຄືສັນຍະລັກ ແລະເປັນກະບອກສຽງນຶ່ງ ໂດຍສະເພາະເປັນສຽງຂອງ ຕະໂຈໂກຣອະມິໂນໂຕເອງ, ລັດຖະບານຜູ້ມີຈະລິຍະທຳໃນຊຸມປີເຫລ່ານັ້ນ ມີທ່າອຽງເບິ່ງຂະບວນການ "ຂອງຊາວພື້ນເມືອງ" ວ່າເປັນການປັບປຸງຕົນເອງ ເຖິງແມ່ນວ່າມີຄວາມກົດດັນ ຢ່າງຮຸນແຮງຈາກທັດສະນະ ຂອງພວກດັດຊ໌ ກໍຕາມ, ລັດຖະບານກໍຍັງປ່ອຍໃຫ້ສະຫະພັນມີອິດສະລະຢ່າງເຕັມປ່ຽມ. ຕະໂຈໂກຣອະມິ ໂນໂຕ ໄດ້ເວົ້າເຖິງສິ່ງຜິດພາດ ທີ່ຕ້ອງແກ້ໄຂໃຫ້ຖືກຕ້ອງ ແລະປະຊາຊົນເປັນລ້ານໆ ກໍໄດ້ຫລັ່ງໄຫລ ຕິດຕາມໄປນຳການຊີ້ນຳອັນເຕັມໄປດ້ວຍບາລະມີຂອງເຂົາ ເຊັ່ນ ພວກຊັ້ນສູງໃນເມືອງຢູ ກຸດຸສ (Kudus), ພວກຊົນຊັ້ນສູງຕາມປະເພນີໃນຊົນນະບົດຢູ່ຊະວາຕາເວັນຕົກ, ພວກຊາວນາອາບາກັນທີ່ ນັບຖືຫລາຍສາສະຫນາ, ພວກມຸດສະລິມ ໃນທົ່ວດອນສູມາຕຣາ, ດອນຊີກີເບຊ ແລະບ່ອນອື່ນໆ ແມ່ນແຕ່ກະໂຕພວກໂຕບາ ຄຣິດສຕຽນເອງ. ທຸກຄົນມີຄວາມເຈັບໃຈຫລາຍ-ຈຳນວນຄົນຫລາຍກວ່າທຳມະດາ ທີ່ເຈັບປວດ ເພາະວ່າພວກເຂົາຢູ່ໃນຍຸກທີ່ປ່ຽນແປງໄວ - ແລະພວກເຂົາໄດ້ລາຍງານເລື່ອງ ເຫລ່ານັ້ນໃຫ້ແກ່ສາຂາຂອງ ຊາເຣກັຕ ອິດສະລາມປະຈຳທ້ອງຖິ່ນກ່ຽວກັບເລື່ອງນ້ຳຖ້ວມໃຫຍ່ ໂດຍຄາດຫວັງວ່າ ຈະມີການປັບປຸງແນວໃດແນວນຶ່ງ. ຍິ່ງໄປກວ່ານັ້ນ ພວກຊາເຣກັຕ ອິດສະລາມ ຍັງໃຫ້ຄວາມ ສຳຄັນແກ່ເລື່ອງ ພຣະເຈົ້າລົງມາໂຜດອີກ. ຕະໂຈໂກໂກຣອະມິໂນໂຕ ເປັນຊື່ ຊະວາຕາມປະເພນີນິຍົມຢູ່ແລ້ວ, ດ້ວຍປາກົດການຂອງສິ່ງທີ່ເປັນຍິ່ງກວ່າ

ຄວາມບັງເອີນ ທີ່ວ່າ ພະເຈົ້າອົງຈະມາໂຜດນັ້ນ ຊື່ວ່າ ພຣະບູ ເຣຣຸ ຕະໂຈໂກຣ (Prabu Heru Tjo-Tjokro). ບັດສະມາຊິກ ຂອງ ຊາເຣກັຕອິດສະລາມ ໄດ້ຮັບຄວາມເຊື່ອ ຖືຢ່າງກວ້າງຂວາງວ່າ ຮັບປະກັນ ຄວາມປອດໄພ. ຕະໂຈໂກຣອະມິໂນໂຕ ໄດ້ວິຈານພະນັກງານພວກຊົນຊັ້ນສູງ ປຣິຍາຍິ ແມ່ນແຕ່ຜູ້ສຳເລັດ ລາຊະການປະຈຳທ້ອງຖິ່ນ ແລະກະໂຕລັດຖະບານດັດຊ໌ ທີ່ຢູ່ຫ່າງໄກແລ້ວ ກໍປາກົດວ່າພວກເຂົາອອນແອ ເກີນກວ່າຈະຢຸດຍັ້ງເຂົ້າໄດ້. ອັນນັ້ນ ອາດຫມາຍຄວາມເຖິງສິ່ງດຽວເທົ່ານັ້ນ ຄື "ວາຫ໌ຍຸ" ອຳນາດວິເສດ ແຫ່ງການປົກຄອງ ໄດ້ຜ່ານໄປສູ່ມືໃຫມ່ແລ້ວ.

ສະມາຊິກຂອງ ເຊຣາກັຕ ອິດສະລາມ ເຕີບໃຫຍ່ຂຶ້ນ ມີຫລາຍກວ່າສອງລ້ານ ໃນປີ 1919, ແຕ່ຕົວ ເລກນັ້ນ ກໍມີຄວາມຫມາຍຫນ້ອຍ ເນື່ອງຈາກວ່າມີແຕ່ສອງສາມຫມື່ນເທົ່ານັ້ນ ເປັນສະມາຊິກ ໃນການ ສັ່ງກັດຢູ່ໃນການຈັດຕັ້ງ ໃນຂະນະທີ່ມີຫລາຍກວ່າສອງລ້ານ ຮູ້ສຶກເຖິງແຮງດຶງດູດ ຂອງຂະບວນການຊາວ ບ້ານ ອັນຍິ່ງໃຫຍ່. ຕະໂຈໂກຣມິໂນໂຕ ແລະສະມາຊິກຜູ້ອື່ນໆໃນຄະນະນຳ ກໍຮູ້ສຶກເຖິງແຮງດຶງດູດ ນີ້ຄືກັນ. ການໂຄສະນາຂອງ ເຊຣາກັຕອິດສະລາມ ມີລັກສະນະໂຈມຕີຮຸນແຮງຫລາຍຂຶ້ນ ໃນລະຫວ່າງປີ 1916 ແລະ 1919. ລັດຖະບານກໍເຮັດຢ່າງດຽວກັນ. ການລຸກຮືຢູ່ທ້ອງຖິ່ນຫລາຍບ່ອນ ຈຶ່ງເກີດຂຶ້ນ ໃນປີ 1919 ເຮັດໃຫ້ຄວາມອົດທົນຂອງລັດຖະບານຫມົດສິ້ນ ໄປຕະຫລອດການ. ພຽງແຕ່ອອກຄຳສັ່ງສັ້ນໆ ສະມາຊິກ ບາງຄົນຂອງ ເຊຣາກັຕ ອິດສະລາມ ຂັ້ນສູນກາງ ແລະສະມາຄົມອິນດີສ ສັງຄົມ ປະຊາທິປະໄຕ (ISDA) ກໍຖືກນຳໄປສືບສວນ ຫລື ຖືກເນລະເທດ. ພະນັກງານ ທ້ອງຖິ່ນ ທັງຄົນດັດຊ໌ ແລະພື້ນເມືອງ ບຸກຮຸກຍົ່ມຢູ ສາຂາຂອງອົງການ ແລະປາບປາມການປະທ້ວງ ຢູ່ທຸກແຫ່ງ.

ປີ 1919 ຫມາຍບອກ ອະວະສານແຫ່ງນະໂຍບາຍກ່ຽວກັບຈະລິຍະທຳ. ຄຳຂວັນບາງຢ່າງກັບ ໂຄງການບາງອັນຍັງຄົງຢູ່ ແຕ່ນັບແຕ່ນັ້ນມາ ຈົນຮອດວາລະສຸດທ້າຍຂອງການປົກຄອງອານານິຄົມໃນປີ 1942 ລັດຖະບານບໍ່ເຄີຍລັງເລໃຈ ທີ່ຈະປາບປາມສິ່ງທີ່ເຫັນວ່າເປັນຂະບວນການຊາວບ້ານທີ່ກໍ່ກວນທຳ ລາຍ. ປີດຽວກັນນີ້ ຍັງເປັນປີຫມາຍບອກ ວາລະສຸດທ້າຍຂອງ ເຊຣາກັຕ ອິດສະລາມ (SI) ໃນຖານະຂະ ບວນການມະຫາຊົນນຶ່ງ. ຜູ້ກໍ່ຕັ້ງອົງການ ຄືຜູ້ທີ່ບໍ່ເປັນພວກສັນຕິໃນເມືອງ ບໍ່ຜ່ານການສຶກສາແບບ ດັດຊ໌ ສ່ວນຫລາຍໄດ້ຫວນກັບໄປຫາ ມຸຣາມມາດິຍາຫ໌. ບັດນີ້ ປັນຍາຊົນຄະລຶຫັດ ໄດ້ຖອນຕົວໄປ ຮ່ວມກັບ ອົງການອື່ນໆ ແລະເບິ່ງໄປໃນທິດທາງໃຫມ່, ສ່ວນມະຫາຊົນສາວົກຈຳນວນຫລວງຫລາຍ ກໍພຽງແຕ່ ແນມໄປທາງອື່ນຊື່ໆ, ຈະວ່າພວກເຂົາຫນີຈາກໄປແທ້ໆກໍບໍ່ແມ່ນ ເພາະວ່າ ແທ້ໆແລ້ວ ພວກເຂົາບໍ່ໄດ້ເຄີຍ ເຂົ້າຢູ່ ນຳອົງການຈັກເທື່ອ.

ສິ່ງທີ່ເຫລືອຢູ່ ມີພຽງຊື່ສັນຍະລັກຂອງການຈັດຕັ້ງ, ຜູ້ນຳ ຕະໂຈໂກຣມິໂນໂຕ ກັບ ພາກສ່ວນທີ່ຈິງ ໃຈກວ່າຫມູ ທີ່ຢູ່ໃນກຸ່ມຜູ້ຕິດຕາມຊຸດທຳອິດ ສ່ວນໃຫຍ່ ແມ່ນພວກຫົວຫນ້າທ້ອງຖິ່ນ ກັບຜູ້ຊາຍທີ່ມີການ ສຶກສາທາງໂລກ ຜູ້ທີ່ບໍ່ພໍໃຈນຳຮູບແບບການດຳລົງຊີວິດແບບຊາວບ້ານ ແຕ່ຫາກຂາດຄຸນສົມບັດສຳລັບ ຫາວຽກງານດີໆເຮັດຢູ່ໃນເມືອງ. ສອງປີກທີ່ຍັງເຫລືອ ຄື ພວກມຸດສະລິມ ແລະພວກສັງຄົມນິຍົມ ຂອງ ການນຳສູນກາງນັ້ນ ກໍເກີດຂັດແຍ່ງກັນຢ່າງເອົາເປັນເອົາຕາຍ. ເມື່ອເປັນແນວນັ້ນ ແຕ່ລະຝ່າຍກໍແນມ ເຫັນຄວາມຈຳເປັນທີ່ຈະກຳນົດເອກະລັກທາງການເມືອງຂອງຕົນໃຫ້ຄັກແນ່ກວ່າເກົ່າ. ພວກສັງຄົມນິຍົມ ປະສົບຄວາມສຳເລັດກ່ອນ. ໃນຂະນະທີ່ສະມາຊິກທີ່ບໍ່ແມ່ນຄົນດັດຊ໌ ຂອງອົງການ ທີ່ກໍ່ຕັ້ງຂຶ້ນໂດຍພວກ ດັດຊ໌ ພາຍໃຕ້ຊື່ພາສາດັດຊ໌ (ISDA) ແລະເຊັ່ນດຽວກັນ ຢ່າງດີສຸດກໍໄດ້ຊື່ວ່າ ເປັນມຸດສະລິມ ຢູ່ໃນອົງ ການຈັດຕັ້ງນຶ່ງ ເຊິ່ງມີຊື່ວ່າ ຊາເຣກັຕ ອິດສະລາມ ແລ້ວ ພວກເຂົາມີເຫດຜົນດີສົມຄວນທີ່ຈະສ້າງພາບ ພົດຂອງຕົນເອງໃຫ້ຄົມເຂັ້ມຂຶ້ນ. ໃນຂະນະດຽວກັນ ການປະຕິວັດຣັດເຊຍ ກໍໄດ້ໃຫ້ ແບບຢ່າງໃຫມ່ທີ່ຫນ້າ ດຶງດູດ ແລະພັກກົກມິນຕັ່ງ (Comintern) ແຂງແຮງພໍຈະໃຫ້ ທິດທາງແກ່ພວກເຂົາ. ໃນປີ 1920 ນັກສັງ ຄົມນິຍົມຫົວຫລາຍ ເຊິ່ງຍັງຮວມເອົາພວກດັຊ໌ ບາງຄົນ ທີ່ຍັງບໍ່ຖືກໄລ່ຫນີ ໄດ້ປ່ຽນຊື່ ອົງການຂອງຕົນ ເປັນ ພັກຄອມມຸຍນິດ ດີ ອິນເດຍ (Perserikatan Komunis di India/ PKT, Indies Communist Party) ແລະໄດ້ເຂົ້າຮ່ວມກັບ ພັກກົກມິນຕັ່ງ ດັ່ງນັ້ນ ພວກເຂົາຈຶ່ງ ກຳນົດເອກະລັກທີ່ໃຫມ່ຮຸນ ແລະມີ

ລັກສະນະສາກົນ. ປີກມຸດສະລິມຂອງ ຣາຈີ ອາກຸສ ຊາລິມ ໄດ້ຍ້າຍໄປໃນທິດທາງສາກົນນິຍົມ ເມື່ອຕົ້ນຊຸມ ປີ 1920, ຈຳເປັນຕ້ອງມີເຄື່ອງຖ່ວງດຶງທາງອຸດົມການ ຕ້ານກັບພັກຄອມມູຍນິດ ດີ ອິນດີຊ (PKT) ແລະ ກໍໄດ້ພົບເຫັນນ້ຳໜັກນັ້ນ ຢູ່ໃນຂະບວນການອິດສະລາມ ອ້ອຍຕ້ອຍໃນທົ່ວໂລກເມື່ອຍຸກນັ້ນ ແລະໄດ້ສຸມໃສ່ ແນວຄຶດການຟື້ນຟູ ເກມານ ອາຕາເຕີກຣ໌ (Kemal Ataturk) ໃນນາມເປັນຜູ້ນຳພາ ແຫ່ງສາສະໜາ (ຄາລິຟ/caliph) ຂອງອິດສະລາມທັງໜົດ.

ບໍ່ດົນ ປີກມຸດສະລິມກໍໄດ້ໄຊຊະນະເໜືອ ຕະໂຈໂກຣອະໂນໂຕ ແລະຄວບຄຸມຊື່ ເຊຣາກັຕ ອິດ ສະລາມ ໄວ້ໄດ້ ບັງຄັບພັກຄອມມູຍນິດ ດີ ອິນດີຊ (PKI) ໃຫ້ອອກໄປຈາກ ຊາເຣກັຕ ອິດສະລາມ ສູນກາງ ໃນປີ 1921. ໃນລະຍະບໍ່ເທົ່າໃດປີຕໍ່ມາ ຢູ່ອີກດ້ານນຶ່ງ ພັກຄອມມູຍນິດ ດີ ອິນດີຊ (PKI) ກໍຄ່ອຍໆໄດ້ຮັບ ການສະໜັບສະໜູນຫລາຍຂຶ້ນໆຈາກສາຂາ ແລະພວກສາວົກສອນຫລວງຫລາຍທີ່ຍັງເຫລືອຢູ່. ແຕ່ລາ ຄາຂອງການຕໍ່ສູ້ອັນຮຸນແຮງນັ້ນ ແພງຫລາຍ ສຳລັບໜົດທຸກຄົນທີ່ກຽວຂ້ອງນຳ. ຢູ່ໃນຫລາຍຈົ່ງເຂດ ຂອງຊະວາ ຄວາມຂັດແຍ່ງທີ່ສະແດງອອກໃນຮູບການທາງອຸດົມຄະຕິໃໝ່ ໄດ້ໃຫ້ຄວາມໝາຍໃໝ່ ແລະ ຍົມຍື່ນ ແກ່ພວກມຸດສະລິມສັນຕຣິ ກັບພວກອາບາກັນຜູ້ນັບຖື ຫລາຍສາສະໜາໃນຊົນນະບົດ, ໂດຍເນັ້ນ ເອກະລັກ ກົງກັນຂ້າມຫລາຍຢ່າງ ເຊິ່ງຕ້ອງຮັບຜິດຊອບໜາກຜົນອັນຮ້າຍແຮງລຸນຫລັງປີ 1945. ຢູ່ ແຫ່ງອື່ນໆ ຄວາມເຄັ່ງຕຶງເຮັດໃຫ້ຄວາມແຮງກ້າແຫ່ງສັດທາ ທີ່ຍັງເຫລືອຢູ່ຂອງຜູ້ປະເຊີນກັບຄວາມ ພິນາດ ຂັ້ນສຸດທ້າຍຢ່າງບໍ່ຄາດຝັນນັ້ນ ມີຊີວິດຊີວາຂຶ້ນ. ການກໍ່ຂະບົດ ທີ່ກະແຈກກະຈາຍ ແລະງ່າຍ ຕໍ່ການຖືກປາບປາມ ລະເບີດຂຶ້ນໃນເດືອນທັນວາປີ 1926 ອອກໜ້າພາທາງ ຢູ່ໃນຫລາຍໆ ເຂດໂດຍ ສະມາຊິກ ພັກຄອມມູຍນິດ ດີ ອິນດີຊ (PKI) ທ້ອງຖິ່ນ. ໃນການປາບປາມຕໍ່ໆມາ ລັດຖະບານໄດ້ກວາດ ລ້າງ " ຜູ້ກໍ່ກວນ " 13.000 ຄົນ ຈາກພັກການເມືອງສີຕ່າງໆ ເນລະເທດໄປຢູ່ໜອງ ນ້ຳກາງແດນໄອ້ປ່າທີ່ ດອນນິວກີນີ 1,000 ຄົນ. ພັກແຕກສະຫລາຍຢູ່ຊົ່ວຮຸ່ນນຶ່ງ ເຊຣາກັຕ ອິດສະລາມ ຖືກປ່ອຍໃຫ້ເຊີດຊູ ພາລະ ກິດອັນມຸດມ້ວຍໄປແລ້ວຂອງ ຜູ້ນຳສາສະໜາອິດສະລາມ ມັນແມ່ນອະວະສານ ຂອງຂະບວນປະຊາຊົນ ອັນຍິ່ງໃຫຍ່ແຫ່ງເຊຣາກັຕ ອິດສະລາມ ແລະຂອງຍຸກການເມືອງຄືກັນ.

ເມື່ອຂະບວນການເກົ່າແຕກສະຫລາຍໄປແລ້ວ ແນວຄຶດກ່ຽວກັບ ອິນໂດເນເຊຍ ໄດ້ເກີດຂຶ້ນທັນທີ ແລະພາຍໃນບໍ່ເທົ່າໃດປີ ກໍໄດ້ປູກຝັງຕົວເອງໄວ້ຕະຫລອດການ ຢູ່ໃນຈິດໃຈຂອງຜູ້ຄົນ ເຊິ່ງບັດນີ້ ໄດ້ກາຍ ເປັນຄົນອິນໂດເນເຊຍໄປແລ້ວ. ໃນເດືອນກໍລະກົດ ປີ 1927 ຄົນກຸ່ມນ້ອຍໆກຸ່ມນຶ່ງ ອອກໜ້າໂດຍ ຊູການໂນ (Sukarno) ໄດ້ຕັ້ງພັກການເມືອງ ແຫ່ງຊາດອິນໂດເນເຊຍ (Partai Nasional Indonesia/PNI) ດັ່ງທີ່ຊື່ ບອກໄວ້ຈະແຈ້ງດີແລ້ວ ພັກຍືນຢັດສະໜັບສະໜຸນເອກະລັກທາງການເມືອງໃໝ່ ເຊິ່ງໃນດ້ານນຶ່ງ ໄດ້ ຜ່ານພົ້ນ ແລະເຕົ້າໂຮມ ເອົາສັງຄົມທັງຫລາຍຂອງອິນດີສ ແລະອີກດ້ານນຶ່ງ ໄດ້ປະກາດອະວະສານ ແຫ່ງການລໍຖ້າ " ເຮືອບິນຈາກ ມອສໂຄວ ຫລື ຄາລິຟ (ຜູ້ນຳພາ)ຈາກ ອິສຕັງບູນ ". ເດືອນຕຸລາ 1928 ກອງປະຊຸມໃຫຍ່ຂອງ ອົງການຈັດຕັ້ງຊາວໜຸ່ມ ໄດ້ນຳເອົາແນວຄວາມຄຶດ ມາແຕ່ງເປັນຄຳເວົ້າອັນ ໂດ່ງດັງ ຄື "ຊາດນຶ່ງຊາດດຽວ-ອິນໂດເນເຊຍ, ປະຊາຊາດດຽວ-ອິນໂດເນເຊຍ, ພາສາດຽວ-ອິນໂດເນເຊຍ". ກອງປະຊຸມໃຫຍ່ ຍັງໄດ້ຮັບຮອງເອົາທຸງການແດງຜ່ານຂາວ ມາເປັນທຸງຊາດຂອງຕົນ ແລະຮ້ອງເພງຊາດ ທີ່ແຕ່ງຂຶ້ນໃໝ່ໆເປັນຄັ້ງທຳອິດຄື ເພງ "ອິນໂດເນເຊຍ ຣາຍາ". ກະແສຟອງ ໄດ້ພັດພີເຂົ້າສູ່ຊີວິດປະຊາຊົນ ຢ່າງວ່ອງໄວ: ສະຫະພັນ ເຊຣາກັຕອິດສະລາມ ໄດ້ກາຍມາເປັນ ພັກເຊຣາກັຕ ອິດສະລາມ ແຫ່ງ ອິນໂດເນເຊຍ ບູດິ ອູໂມໂຕ ໂຮມເຂົ້າເປັນພັກໃໝ່ ອິນໂດເນເຊຍ ຣາຍາ, ອົງການຈັດຕັ້ງໃໝ່ ຫລາຍຮ້ອຍ ແຫ່ງທີ່ມີຊື່ຂຶ້ນ ຕົ້ນດ້ວຍຄຳວ່າ ອິນໂດເນເຊຍ ຖືກສ້າງຕັ້ງຂຶ້ນໃນບໍ່ເທົ່າໃດປີຕໍ່ມາ. ເລິກລົງໄປກວ່ານີ້ ຢູ່ໃນ ຄວາມຄຶດສ່ວນຕົວຂອງພວກເຂົາ ທັງແມ່ຍິງແລະຜູ້ຊາຍ ຜູ້ມີການສຶກສາແບບສະໄໝໃໝ່ ອອກມາ ສະແດງຕົນເອງວ່າເປັນ ຄົນອິນໂດເນເຊຍ.

ແນວຄວາມຄຶດກ່ຽວກັບອິນໂດເນເຊຍ ແຜ່ກະຈາຍຢ່າງງ່າຍດາຍທັນທີ ເມື່ອຖືກໂຍນອອກໄປຈົນ ປາກົດຕໍ່ສາຍຕານັກປະຫວັດສາດຮຸ່ນຫລັງໆ ຄືກັບວ່າ ແນວຄຶດນີ້ເຄີຍມີຢູ່ຫັ້ນຕະຫລອດມາ ຄ້າຍຄືວ່າ ບໍ່

ແມ່ນເລື່ອງໃຫມ່ອ່ຽມສຳລັບປັດຈຸບັນ ແຕ່ຫາກໄດ້ສິ່ງສະຖິດຢູ່ໃນຫົວໃຈປະຊາຊົນມາດົນນານແລ້ວ. ແຕ່ໃນ ຕົວຈິງມັນແມ່ນການປະດິດສ້າງຂຶ້ນໃຫມ່, ເປັນຫມາກຜົນອັນຍິ່ງໃຫຍ່ແລະຫຍຸ້ງຍາກຂອງບາດກ້າວກະໂດດ ແຫ່ງການສ້າງຜາບຜົດ. ແນວຄວາມຄຶດເລື່ອງ ອິນໂດເນເຊຍ ຕ້ອງການໃຫ້ມີການປະຕິເສດຄວາມຫມາຍ ທາງການເມືອງ ຂອງສັງຄົມທີ່ຊາວອິນໂດເນເຊຍຮຸ່ນທຳອິດ ຖືກຳເນີດອອກມາ. ແນວຄຶດນັ້ນ ຍັງ ຕ້ອງການໃຫ້ມີການຍອມຮັບຄວາມເປັນຈິງໃຫມ່ ກຽວກັບເກາະດອນອິນດີສ໌ຂອງດັດຊ໌ ແລ້ວລອກຄາບ ມັນໃຫ້ເປັນ ອິນໂດເນເຊຍ. ໃນທົດສະວັດທຳອິດຂອງສະຕະວັດນີ້ ຄວາມຈິງກໍຄື ມີແຕ່ຜູ້ມີການສຶກສາແບບ ດັດຊ໌ ເທົ່ານັ້ນ ຈຶ່ງມີປະສົບການທີ່ເຮັດໃຫ້ຫົວຄຶດປະດິດສ້າງແບບກະໂດດຂັ້ນນີ້ ເປັນໄປໄດ້ ແລະມີຄວາມ ຈຳເປັນຢ່າງຂາດບໍ່ໄດ້. ຢູ່ໃນໂຮງຮຽນທີ່ສອນພາສາດັດຊ໌ ສະມາຊິກຂອງຫມົດທຸກຊົນເຜົ່າ ໄດ້ຜ່ານຜ່າ ການປ່ຽນແປງຮູບໂສມການສຶກສາອັນດຽວກັນ ແລະໄດ້ກາຍມາເປັນຜູ້ທີ່ມີສິ່ງຮ່ວມກັນ ແບບທີ່ຜູ້ບໍ່ໄດ້ຮັບ ການສຶກສາແບບພວກດັດຊ໌ ມີນັ້ນ ຄືຄວາມເປັນມາຂອງຊົນຊາດຊົນເຜົ່າຂອງຕົນ. ວຽກງານທີ່ພວກເຂົາ ເຮັດສ່ວນຫລາຍເກືອບບໍ່ເຄີຍມີ ໃນສັງຄົມແບບເດີມ ໂດຍມີຄວາມຫມາຍພຽງແຕ່ວ່າແມ່ນ ແບບອິນດີຊ ເພື່ອເປັນການອ້າງອີງເທົ່ານັ້ນ. ຕົວເມືອງທັນສະໄຫມບ່ອນທີ່ພວກເຂົາໄປຮຽນແລະເຮັດວຽກນັ້ນ ເບິ່ງໃນ ຫລາຍໆດ້ານກໍມີຄວາມໃກ້ຄຽງກັນແລະກັນ ຫລາຍກວ່າຢູ່ທີ່ເຂດພູດອຍ ບ່ອນທີ່ພວກເຂົາເຄີຍຢູ່ມາກ່ອນ.

ເຖິງວ່າເປັນແນວນັ້ນ ມາຮອດກາງຊຸມປີ 1920 ຜູ້ທີ່ຍັງຂັນແຂງໃນເລື່ອງການເມືອງໃນຫມູ່ພວກ ເຂົາ ກໍໄດ້ເຂົ້າຮ່ວມອົງການຈັດຕັ້ງຕ່າງໆເຊັ່ນ ບູດີ ອູໂຕໂມ, ເຊຣາກັຕ ອິດສະລາມ ແລະ ຈອງ ມິນນາ ຣາຊຊາ ເຊິ່ງແນ່ນອນວ່າບໍ່ແມ່ນຂອງ ອິນໂດເນເຊຍ. ມັນແມ່ນຈຳນວນນ້ອຍໆ ຂອງກຸ່ມນ້ອຍໆ ຄືນັກ ສຶກສາ ຢູ່ ໂຮນແລນ ຜູ້ເຊິ່ງກຳການນຳພາຢ່າງແທ້ຈິງ ດ້ວຍການສ້າງແນວຄຶດກຽວກັບ ອິນໂດເນເຊຍ ໃນໂຮນແລນ ພວກນີ້ ຖືກປົດປ່ອຍອອກຈາກຄວາມເປັນຈິງປະຈຳວັນຢູ່ໃນດອນອິນດີສ ທີ່ບັນຊາການ ໂດຍ ພວກດັດຊ໌ ແລະພວກເຂົາກໍສາມາດວາດພາບເຖິງມັນ ໃນຖານະເປັນອົງຮວມນຶ່ງດຽວ ແຕ່ບໍ່ຈຳເປັນ ຄືຫມູ່ ເກາະດອນອິນດີສ. ພວກເຂົາຍັງຖືກປົດປ່ອຍອອກຈາກພັນທະດ້ານຊົນເຜົ່າທັງຫມົດ, ມັນເປັນເລື່ອງທີ່ບໍ່ ອາດສຳນຶກໄດ້ ສຳລັບພວກເຂົາ ເຊິ່ງມີນຳກັນປະມານຫລາຍສິບຄົນ ໃນຖ້ຳມກາງຊາວດັດຊ໌ ເປັນລ້ານໆ ທີ່ຈະແຕກແຍກອອກເປັນ ພວກຈອງຊະວາ, ຈອງ ຊີລີເບຊ ແລະອື່ນໆ. ການຈັດຕັ້ງທຳອິດຂອງພວກເຂົາມີ ຂຶ້ນໃນປີ 1908 ເອີ້ນວ່າ ສະມາຄົມ ອິນດີສ໌, ກະໂຕສະມາຄົມເອງ ກໍເປັນຕົວບົ່ງຊີ້ຢ່າງເຕັມຕົວ ແລະຈະ ແຈ້ງຂອງເອກະລັກອັນທຳມະດາ. ການຕັດສິນໃຈປີ 1922 ທີ່ຈະສ້າງຕັ້ງອົງການນັ້ນ ຄືນ ໃຫມ່ໃນຖານະ ອິນໂດເນເຊຍ ເປີຮິມປູນັນ (Perhimpunan Indonesia/PI) ຫລື ສະມາຄົມ ອິນໂດເນເຊຍ ແມ່ນຄຳປະ ກາດຈະແຈ້ງອັນທຳອິດ ແຫ່ງການກຳເນີດເອກະລັກອິນໂດເນເຊຍ.

ຄຳວ່າ "ອິນໂດເນເຊຍ" ໄດ້ເລີ່ມຊົມໃຊ້ຢູ່ໃນການສົນທະນາ ຢູ່ກັບບ້ານກັບເຮືອນກ່ອນ ແຕ່ໃຊ້ເວລາ ຫລາຍປີກວ່າຈະນຳໄປປະຕິບັດໄດ້ ແລະອີກຫລາຍປີກວ່າແຜນວຽກຂອງ ພັກຈະໄດ້ຮັບການຍອມຮັບຢ່າງ ກວ້າງຂວາງ. ພວກນັກສຶກສາຜູ້ມີຄວາມສ່ຽງຫນ້ອຍໃນການສະຖາປະນາອົງການຈັດຕັ້ງແລະເອກະລັກໄດ້ ຕອບຮັບຢ່າງວ່ອງໄວ, ມີຊາວຫນຸ່ມສອງກຸ່ມຊື່ຂຶ້ນຫນ້າດ້ວຍ "ອິນໂດເນເຊຍ" ແລະແຜນງານໃນລັກສະນະ ຊາດນິຍົມແບບກົງໆ ໄດ້ຮັບການຈັດຕັ້ງຂຶ້ນໃນປີ 1927 ກ່ອນພັກ. ແຕ່ແມ່ນພັກເອງ ທີ່ຈັບກະແສທ່າອຽງ ອັນພວມເຕີບໃຫຍ່ ໄດ້ຖືກກາລະເທສະ ແລະ ໂດຍແລ່ນນຳບຸກຄະລິກອັນໂດດເດັ່ນຂອງ ຊູການ໌ໂນ - ແລ້ວ ພັກກໍໄດ້ເປັນ ຜູ້ນຳເອົາລັດທິຊາດນິຍົມ ອິນໂດເນເຊຍ ອອກມາເປີດເຜີຍ ຢູ່ໃນແຜ່ນດິນອິນດີສ໌ ແລະ ໄດ້ເຮັດ ທຸກຢ່າງທີ່ຮັບປະກັນຜົນສຳເລັດຂອງລັດທິ ນີ້.

ຊີວິດການເມືອງຂອງ ອິນໂດເນເຊຍ ໃນຊຸມປີ 1930 ດຳເນີນໄປຖ້ຳມກາງການຄວບຄຸມຢ່າງເຂັ້ມ ງວດ ແລະ ການປາບປາມໃນບາງຄັ້ງຄາວ ແຕຫາກມີປະສິດທິຜົນຂອງຝ່າຍຕຳຫລວດ ອັນໄດ້ເຮັດໃຫ້ ການເຄື່ອນໄຫວຂອງມະຫາຊົນເປັນໄປໄດ້ຍາກ ແລະກີດກັນພວກພະນັກງານແລະຜູ້ອື່ນໆໃຫ້ອອກຈາກກິດ

ຈະກຳສາທາລະນະ. ພາຍໃນຂອບເຂດພື້ນທີ່ອັນຄັບແຄບທາງການເມືອງນັ້ນ ແນວຮ່ວມອົງການຈັດຕັ້ງ ຕ່າງໆທັງຫລາຍ ໄດ້ເຕີບໃຫຍ່ຂຶ້ນ, ແຕກແຍກກັນ, ໂຮມເຂົ້າກັນ ແລະຜິດຖຽງກັນໃນຫມູ່ພວກເຂົາເອງ ແຕ່ ບໍ່ມີຫຍັງກ່ຽວກັບຫລັກການພື້ນຖານ. ສະມາຄົມຂອງບາງຊົນເຜົ່າ ໄດ້ສືບຕໍ່ເຄື່ອນໄຫວຢ່າງຫ້າວຫັນ ແຕ່ກໍ ມີຈຳນວນຫນ້ອຍຫນຶ່ງທີ່ເຫັນວ່າຕົນເອງ ເປັນພາກສ່ວນຕົວແທນຂອງ ອິນໂດເນເຊຍ ຜູ້ຍິ່ງໃຫຍ່ ທັງຫມົດ ຫລາຍກວ່າເປັນຂອງຫົວຫນ່ວຍແບ່ງແຍກ. ອົງການມຸດສະລິມທັງຫລາຍ ທັງທີ່ກິດຈະກຳເປັນເລື່ອງການ ເມືອງ ກໍໄດ້ຍອມຈຳນົນເລີກລົ້ມຂະບວນການໃຫຍ່-ອິດສະລາມ ໂດຍສະແຫວງຫາຄຳນິຍາມຂອງ ອິນໂດເນ ເຊຍ ດ້ວຍຄຳສັບອິດສະລາມແທນພວກ"ບໍ່ເປັນ"ຈຳນວນຫນ້ອຍດຽວ (ບໍ່ເປັນຜູ້ຮ່ວມມື non-co-operators) ທີ່ປະຕິເສດການເຮັດວຽກຢູ່ພາຍໃນສະຖາບັນອານານິຄົມ ເຊັ່ນ ຄະນະກຳມະການ ເລືອກຕັ້ງທີ່ລ່ອຍລ້າ ຂາດພະລັງໃນສະໄຫມນັ້ນ, ໄດ້ໂຈມຕີຝ່າຍສຽງ ສ່ວນຫລາຍຂອງ" ຜູ້ຮ່ວມມື " (co's) ຜູ້ຊຶ່ງຢາກເຮັດແບບ ນັ້ນຄືກັນຢູ່ແລ້ວ. ແຕ່ຄວາມຂັດແຍ່ງກ່ຽວຂ້ອງກັບແຕ່ເລື່ອງ ກົນລະຍຸດເທົ່ານັ້ນ. ເມື່ອພວກ ຍີ່ປຸ່ນ ເຂົ້າມາ ໃນປີ 1942, ສະມາຊິກຂອງຊົນຊັ້ນນຳໃນເມືອງແລະພວກຊົນຊັ້ນລະດັບສູງຕາມການສືບທອດເຊິ່ງສ່ວນໃຫຍ່ ກໍສັງກັດຢູ່ກັບພວກດັດຊ໌ ໄດ້ຮ່ວມຮັບເອົາເອກະລັກແຫ່ງຊາດ ອິນໂດເນເຊຍ ອັນດຽວກັນນີ້ ແລະເປັນອັນທີ່ມີ ຮາກຖານດີແລ້ວນີ້ນຳກັນ.

ໃນລະຍະເວລາສອງທົດສະວັດດຽວກັນ ທີ່ແນວຄຶດທາງການເມືອງກ່ຽວກັບອິນໂດເນເຊຍ ກໍ່ເກີດ ຂຶ້ນ ແລະເປັນທີ່ຍອມກັນຮັບທົ່ວໄປໃນຫມູ່ຄົນຊັ້ນສູງຜູ້ມີການສຶກສາແບບສະໄຫມໃຫມ່, ຂະບວນຄູຂະຫນານ ອັນນຶ່ງແຫ່ງການປະດິດສ້າງວັດທະນະທຳແຫ່ງຊາດ ກໍພວມເປັນໄປເຊັ່ນດຽວກັນ. ສັນຍະລັກສຳຄັນຂອງ ຂະບວນການນັ້ນ ແມ່ນການປ່ຽນແປງພາສາມາເລສາກົນ ໃນທົ່ວເກາະດອນທັງຫລາຍ ມາ ເປັນພາສາ ແຫ່ງຊາດ ຄື ພາສາອິນໂດເນເຊຍ ອັນເປັນການກະທຳຢ່າງນຶ່ງ ແຫ່ງການປະດິດສ້າງຄືນໃຫມ່ ຄ້າຍຄືກັນ ກັບການສ້າງທາງອັນໃດອັນນຶ່ງໃນດ້ານການເມືອງ ຊຶ່ງກໍມີຄວາມສຳຄັນຫລາຍ. ແຕ່ເບິ່ງໃນແງ່ອື່ນໆ ຊ້ຳມີ ຄວາມແຕກຕ່າງໃຫຍ່ຫລວງກວ່າ. ແນວຄຶດທາງການເມືອງກ່ຽວກັບອິນໂດເນເຊຍ ໄດ້ກຳເນີດຂຶ້ນ ໃນຈິດໃຈ ຂອງຄົນຜູ້ມີຮາກຖານແບບນຶ່ງ ໃນສັງຄົມທ້ອງຖິ່ນ ແລະດ້ວຍວ່າໄດ້ຜ່ານ ການສຶກສາແບບ ດັດຊ໌ມາແລ້ວ ກໍເລີຍເປັນຜູ້ທີ່ເຂົ້າໃຈຄວາມເປັນຈິງຂອງຫມູ່ເກາະດອນອິນດີສສະໄຫມໃຫມ່. ເບິ່ງໃນຈຸດນັ້ນ ພວກເຂົາເປັນ ນັກການເມືອງສອງຫນ້າ ດ້ວຍວ່າ ເມື່ອຢູ່ໃນເຮືອນ ພວກເຂົາຢູ່ໃນສອງໂລກການເມືອງຕ່າງກັນ ມີຄວາມ ສຸກສະບາຍດີ ສຳລັບກໍລະນີພວກ ອຳໂບນອນ ກັບພວກ ມີນາຮັສຊັນ (Ambonese & Minahassan) ແລະ ພວກຊົນຊັ້ນສູງຕາມປະເພນີ ຜູ້ໃກ້ຊິດກັບກັບພວກດັດຊ໌, ແຕ່ບໍ່ສະດວກສະບາຍສຳລັບ ພວກປັນຍາຊົນໃຫມ່ ໃນເມືອງ. ແຕ່ເມື່ອໄດ້ຜ່ານກ້າວກະໂດດໃຫຍ່ໄປແລ້ວ ແລະທັງກໍໄດ້ນິຍາມກັນຄືນໃຫມ່ ແລ້ວວ່າ ອິນດີສ ເນເທີແລນ ແມ່ນ ອິນໂດເນເຊຍ ກໍຈຶ່ງກາຍເປັນເລື່ອງງ່າຍຂຶ້ນ ສຳລັບພວກປັນຍາຊົນທີ່ ຈະເຂົ້າຜູກພັນ ຈິງໃຈຢ່າງບໍ່ລັ່ງເລກັບເອກະລັກໃຫມ່ທາງການເມືອງອັນນີ້. ເກາະດອນອິນດີສ ໃນຖານະເປັນລະບົບນຶ່ງ ທີ່ເດີນຫນ້າມີຕົວຕົນຢູ່ຫັ້ນແລ້ວ, ພວກເຂົາພຽງແຕ່ຍຶດໂອນເອົາມັນມາເປັນຂອງພວກເຂົາ ເທົ່ານັ້ນ, ທຳອິດ ເຮັດແບບເປັນສັນຍະລັກຊື່ໆ ແລະຕໍ່ມາກໍໃຫ້ເປັນແທ້ໆ. ເມື່ອເຮັດໄດ້ຢ່າງນັ້ນກໍນັບວ່າພວກ ເຂົາໄດ້ຮັບໃຊ້ ຜົນປະໂຫຍດທາງການເມືອງຂອງພວກຕົນໄປນຳ ເນື່ອງຈາກວ່າ ພວກເຂົານັ້ນເອງທີ່ຈະເປັນ ຜູ້ມີໂອກາດ ປະເສີດສຸດ ໃນການກ້າວສູ່ການເປັນ ຜູ້ນຳທາງ ການເມືອງໃນອິນໂດເນເຊຍເອກະລາດ.

ການສຶກສາແບບດຽວກັນນີ້ ຍັງໄດ້ເຮັດໃຫ້ພວກເຂົາເປັນຜູ້ມີສອງວັດທະນະທຳ ໂດຍສະເພາະ ເປັນ ຜູ້ເວົ້າໄດ້ສອງພາສາ ຄື ພາສາທ້ອງຖິ່ນບ້ານຕົນເອງ ແລະ ພາສາດັດຊ໌. ຢ່າງໃດກໍດີ ຄວາມເຄັ່ງຕຶງອັນນີ້ ກໍບໍ່ແມ່ນວ່າຊິຜ່ານຜ່າໄປໄດ້ງ່າຍໆ. ດ້ານນຶ່ງ ພວກເຂົາບໍ່ສາມາດຕັດສິນໃຈຢຸດການຄຶດແບບຄົນຊະວາ ຫລື ແບບ ມາດູຣາ ຫລື ລຶບລ້າງຄວາມຊາບຊຶມວັດທະນະທຳແຫ່ງໄວເຍົາຂອງພວກຕົນໄດ້ ຍ້ອນວ່າ ພວກເຂົາບໍ່ສາມາດຜັນປ່ຽນການອຸທິດຕົນທາງດ້ານການເມືອງຂອງຕົນໄດ້. ອີກດ້ານນຶ່ງພວກເຂົາພໍພຽງ

ແຕ່ວ່າບໍ່ສາມາດຕັ້ງຊື່ໃຫມ່ເປັນ "ອິນໂດເນເຊຽດັດຊ໌" ນັ້ນຊື່ໆ ຫລື ບໍ່ກໍບໍ່ສາມາດຍຶດເອົາວັດທະນະທໍາດັດຊ໌ ຈາກເຈົ້າຂອງເດີມ ມາເປັນຂອງຕົນເອງມາເຮັດໃຫ້ມັນເປັນຂອງຕົນຜູ້ດຽວ ດັ່ງທີ່ພວກເຂົາຫວັງຈະ ເຮັດ ຄືກັນກັບຫນ່ວຍການເມືອງເກາະດອນອິນດີສ.

ແມ່ນຄວາມເຄັ່ງຕຶງອັນນີ້ເອງ ທີ່ເປັນສາເຫດໃຫ້ພາສາອິໂດເນເຊຽ ກໍາເນີດຂຶ້ນ, ແມ່ນສິ່ງທີ່ນັກ ຂຽນທ່ານນຶ່ງ ໄດ້ເອີ້ນໄວ້ຢ່າງເຫມາະສົມວ່າ " ພາສາມາເລ ປະຕິວັດ" ແລະວ່າ ເປັນ "ທຸລະກິດມະຫຶມາ ແຫ່ງການກອບກູ້ວິກິດການອັນຫນັກຫນ່ວງທາງວັດທະນະທໍາ". ເບິ່ງໃນຫລາຍໆທາງພາສາມາເລມີຄວາມ ເຫມາະສົມຢ່າງສູງ ສໍາລັບບົດບາດທີ່ຕ້ອງສະແດງ, ມັນເປັນພາສາປາກເວົ້າ ຢູ່ກັບເຮືອນຂອງປະຊາຊາດ ທີ່ກະແຈກກະຈາຍຢູ່ບໍ່ທໍ່ໃດຊົນເຜົ່າເທິງຫມູ່ເກາະດອນອິນດີສ ດັ່ງນັ້ນຈຶ່ງມີຂໍ້ໄດ້ປຽບທາງການເມືອງຫລາຍ ເພາະບໍ່ໄດ້ເປັນຂອງຊົນເຜົ່ານຶ່ງຊົນເຜົ່າດຽວ. ໃນອີກຄວາມຫມາຍນຶ່ງ ພາສາມາເລ ເປັນຂອງທຸກຄົນ ເພາະມັນເຄີຍເປັນພາສາປະສົມສໍາລັບການຄ້າຂາຍ ແລະສາສະຫນາ ອິດສະລາມ ຢູ່ເທິງຫມູ່ເກາະດອນ ທັງຫມົດມາໄດ້ຫລາຍສະຕະວັດແລ້ວ. ດັ່ງນັ້ນ ພາສານີ້ຈຶ່ງມີຄຸນຄວາມດີຫລາຍຢ່າງຄື: ປັບແປງໄດ້, ມີລັກ ສະນະປະຊາທິປະໄຕ ເພາະຄໍາສັບແບ່ງແຍກສະຖານະໄດ້ຂາດຫາຍໄປ, ມີຄວາມງ່າຍດາຍ ທີ່ໄຂທາງໃຫ້ ຊາບຊຶມ ເອົາຄໍາສັບ ແລະຄວາມຫມາຍຫລັກແບບສະໄຫມໃຫມ່ຂອງມັນ.

ຄຸນສົມບັດອັນນີ້ແທ້ໆ ທີ່ເຮັດໃຫ້ພາສາມາເລເຫມາະສົມ ສໍາລັບການປ່ຽນແປງມາເປັນພາສາ ອິນໂດເນເຊຽ ເຖິງວ່າມັນໄດ້ເຮັດໃຫ້ກິດຈະການນີ້ຄອນແຄນໄປແດ່ໃນສອງທົດສະວັດຕົ້ນຂອງມັນ ແລະຫລັງ ທົດຫລັງທາງຢູ່ດົນເຕີບ. ນັບແຕ່ຊຸມປີ 1920 ເປັນຕົ້ນມາ ວັນນະຄະດີແບບສະໄຫມໃຫມ່ ຂອງອິນໂດເນເຊ ຽເລີ່ມປາກົດຂຶ້ນ ສ່ວນຫລາຍແມ່ນຂຽນໂດຍ ນັກຂຽນທີ່ກ່ຽວຂ້ອງກັບສໍານັກຈັດພິມຂອງ ລັດຖະບານທີ່ມີຊື່ ສຽງ ຄື ບາໄລ ປຸສຕາກາ (Balai Pustaka) ແລະ ຈາກວາລະສານພາສາ ອິນໂດເນເຊຽຊື່ ປຸດຈັງກາບາຣູ (Pudjangga Baru) ຂອງຊຸມປີ 1930. ແຕ່ເປັນຫນ້າສັງເກດຢູ່ບ່ອນວ່າ ເປັນຫຍັງມີນັກຂຽນຫລາຍຄົນ ເປັນຄົນສຸມາຕຣາ ໂດຍສະເພາະພວກ ມີນັງກາໂບ ທີ່ມີພາສາໃກ້ຄຽງກັບ ພາສາມາເລ ຫລາຍ, ອັນນີ້ ພິສູດວ່າເປັນເລື່ອງຍາກສໍາລັບຊາວຊະວາ ແລະຜູ້ອື່ນໆທີ່ຈະສ້າງສັນຜົນງານ ການຂຽນດ້ວຍພາສາແຫ່ງ ຊາດໄດ້. ຊີວິດຢ່າງເປັນທາງການຂອງອົງການຈັດຕັ້ງ ອິນໂດເນເຊຽ ສ່ວນຫລາຍນໍາໃຊ້ພາສາ ອິນໂດເນ ເຊຽ ເກືອບຫມົດແຕ່ມີຫນ້ອຍທີ່ຄຶດເປັນພາສາ ອິນໂດເນເຊຽ. ການປະຊຸມຄະນະກໍາມະການ, ການຂຽນ ຣາງບົດ ແລະຊີວິດສ່ວນຕົວຂອງພວກປັນຍາຊົນເກືອບທັງຫມົດ ຍັງຕ້ອງສືບຕໍ່ໃຊ້ພາສາ ດັດຊ໌ຢູ່ ຫລື ດ້ວຍ ພາສາທ້ອງຖິ່ນ. ຍິ່ງໄປກວ່ານີ້ໂຮງຮຽນໃນລະບົບອິນດີສເວລານັ້ນຍັງມີແຕ່ຫນ້ອຍດຽວເທົ່ານັ້ນ ທີ່ໃຊ້ພາສາ ອິນໂດເນເຊຽ ສໍາລັບການສອນ. ທີ່ແທ້ແລ້ວ ກ່ອນປີ 1942 ມີການຊຸ້ມໃຊ້ພາສານີ້ ຕາມໂຮງຮຽນໃນລະບົບ ຕາມັນ ຊິສວາ (Taman Siswa) ເທົ່ານັ້ນ ເຊິ່ງໂຮງຮຽນນີ້ຕັ້ງຂຶ້ນໂດຍ ກິ ຮັດຈາຣ໌ ເດວັນໂຕໂຣ (Ki Hadja Dewantoro) ໃນປີ 1922 ແລະ ຢູ່ໃນ " ໂຮງຮຽນປ່າ " ບາງບ່ອນທີ່ບໍ່ຖືກຕ້ອງ ຕາມກົດຫມາຍ ແລະມີລັກສະນະການເມືອງອ້ອຍຕ້ອຍ ເມື່ອຊຸມປີ1930, ເຊິ່ງອາດຕີລາຄາໄດ້ວ່າ ເປັນການເລີ່ມຕົ້ນຂອງ ວິທີການສຶກສາຕົ້ນຕໍສໍາລັບຊາວອິນໂດເນເຊຽສະໄຫມໃຫມ່. ໃນຂະນະດຽວກັນນັກສຶກສາຜູ້ເປັນອິນໂດເນເຊຽ ດ້ວຍຄວາມສັດທາທາງການເມືອງ ແລະມີຄວາມຕິດພັນຢູ່ກັບອຸດົມຄະຕິ ວັດທະນະທໍາດຽວ ແຫ່ງຊາດ ອິນໂດເນເຊຽ ຍັງຄົງສືບຕໍ່ສຶກສາຮ່ໍາຮຽນເປັນພາສາດັດຊ໌ ຢ່າງກວ້າງຂວາງຢູ່ ຄືກັນກັບພວກຮຸ່ນອ້າຍ ຂອງພວກເຂົາ. ມາຮອດລະຍະສ້ຽງສຸດການປົກຄອງອານານິຄົມ ເອກະລັກວັດທະນະທໍາຂອງອິນໂດເນເຊຽ ບໍ່ຄືກັບເອກະລັກທາງການເມືອງ ມັນພຽງແຕ່ຖືກຍົດເປັນຮ່າງໄວ້ຕາມຫລັກການ ແລະ ໄດ້ນໍາໃຊ້ປະຕິບັດ ກັນກໍແຕ່ໃນວົງແຄບໆເທົ່ານັ້ນ.

ຢ່າງໃດກໍດີ ໃນຄວາມຫມາຍກວ້າງໆ, ສິ່ງດຽວກັນນີ້ ກໍເປັນຄວາມຈິງ ສໍາລັບທັງສອງຢ່າງ. ແນວ ຄວາມຄຶດກ່ຽວກັບອິນໂດເນເຊຽ ທັງໃນຄວາມຫມາຍດ້ານການເມືອງແລະວັດທະນະທໍາ ໄດ້ບັນລຸຜົນແລະ

ຢ່ຽງຮາກລົງເລິກດີແລ້ວ. ແຕ່ກໍຍັງຈຳກັດຢູ່ກັບແຕ່ອັດຕາສ່ວນນ້ອຍໆ ຂອງປະຊາກອນທັງຫມົດຢູ່ ຄືພວກທີ່ເຄີຍຖືກປ່ຽນແປງ ຍ້ອນລະບົບການສຶກສາແບບທັນສະໄຫມແບບໃດແບບນຶ່ງ: ດັດຊ໌, ມຸດສະລິມ ຄຣິດສຕຽນ ຈຳນວນຫນ້ອຍດຽວ ແລະ ແບບອິນໂດເນເຊຽ ທີ່ຍິ່ງຫນ້ອຍກວ່າອີກ. ນອກຈາກພວກເຂົາແລະ ຢູ່ອ້ອມໆ ພວກເຂົາຍັງຄົງມີມະຫາຊົນຊາວນາທີ່ຍັງດຳລົງຊີວິດຢູ່ໃນໂລກການເມືອງ ແລະວັດທະນະທຳທີ່ກຳນົດດ້ວຍ ພາສາຂອງບັນດາສັງຄົມແຫ່ງຫມູ່ເກາະດອນ. ໃນຕົວຈິງຜົນສະທ້ອນສຳຄັນອັນນຶ່ງຈາກການປ່ຽນແປງ ຄັ້ງໃຫຍ່ໃນລະຍະສີ່ສິບປີມານີ້ ໄດ້ໄຂໂກນໃຫຍ່ທີ່ອັນຕະລາຍ ໃຫ້ເກີດຂຶ້ນລະຫວ່າງ ຊົນຊັ້ນສູງ ອິນໂດເນເຊຽ ກັບ ປະຊາຊົນຊາວບ້ານ ເຊິ່ງພວກເຂົາກໍເອີ້ນວ່າ ເປັນຄົນອິນໂດເນເຊຽ ຄືກັນ.

# ບົດທີ 28 ປະເທດ ຫວຽດນາມ

ການຮັບເອົາສະຖາບັນ ແລະ ປັດຊະຍາຕາເວັນຕົກເຂົ້າມາຢ່າງເລິກເຊິ່ງ, ລັດທິບຸກຄົນນິຍົມທີ່ພວມເຕີບໃຫຍ່ຢູ່ໃນຫມູ່ຄົນຊັ້ນສູງ ແລະ ຄວາມຂັດຂ້ອງລະຫວ່າງຄ່ານິຍົມເກົ່າກັບຄ່ານິຍົມໃຫມ່ ບໍ່ແມ່ນລັກສະນະເດັ່ນ ຢູ່ໃນຊີວິດຂອງຊາວວຽດນາມເມື່ອກ່ອນປີ 1900. ຖ້າຫາກລັດທິຊາດນິຍົມໃນຄວາມຫມາຍຂອງອາຊີຕາເວັນອອກສຽງໃຕ້ ຫມາຍເຖິງອຸດົມການທີ່ເນັ້ນຫນັກການອະນຸຮັກເອກະລັກ ທາງວັດທະນະທໍາ ພ້ອມໆກັບການຄົ້ນພົບອັນໃຫມ່ ທີ່ບໍ່ແມນຂອງຕາເວັນຕົກ ແລະ ຄວາມກົມກືນທາງດ້ານເຕັກນິກວັດຖຸຂອງຕາເວັນຕົກສະໄຫມໃຫມ່ກັບແນວຄຶດປະຕິວັດ, ການຕ້ານທານຂອງ ຫວຽດນາມ ຕໍ່ລັດທິອານານິຄົມຂອງຝຣັ່ງ ກ່ອນຊຸມປີ 1900 ບໍ່ແມ່ນເລື່ອງຂອງຄວາມເປັນຊາດນິຍົມ ແຕ່ເປັນຫມາກຜົນຮວມຂອງພະຍາດຢ້ຽ້ານຊາດຈີນ ແລະລັດທິຄວາມຈົງຮັກພັກດີຕໍ່ຂົງຈື. ເຖິງແນວໃດກໍດີ ນັ້ນກໍຍັງບໍ່ແມ່ນຜູ້ນໍາ ຫນ້າທີ່ສໍາຄັນທີ່ສຸດ ສໍາລັບລັດທິຊາດນິຍົມຂອງ ຫວຽດນາມ. ບາງທີອາດເປັນທີ່ຕ້ອງການຢູ່ແລ້ວເພື່ອໃຈ້ແຍກ ລະຫວ່າງອຸດົມການຂອງພວກປະເພນີນິຍົມຍຸກກ່ອນລັດທິຊາດນິຍົມຂອງຝ່າຍຕໍ່ຕ້ານ ແລະອຸດົມການແຫ່ງ ການຊຶມຊັບຄວາມປ່ຽນແປງຂອງຝ່າຍຕໍ່ຕ້ານ ຢູ່ໃນປະຫວັດສາດ ຫວຽດນາມສະໄຫມໃຫມ່.

ການຕໍ່ຕ້ານການຍຶດຄອງໂກແຊງຊິນ ຂອງ ຝຣັ່ງ ໃນພາກໃຕ້ ເມື່ອຊຸມປີ 1860 ນໍາພາໂດຍບຸກຄົນທີ່ມີພື້ນຖານແຕກຕ່າງກັນຄື ພວກລູກຊາຍຂອງນາຍທະຫານຜູ້ບັນຊາການ( ຕຣອງກົງດິນຫ໌ Truong Cong Dinh), ບັນດິດ ຊື່ ຫງຽວນ ຫູ ຫວນ, (Nguyen Huu Huan) ແລະຄົນຫາປາ (ຫງວຽນ ຕຣອງ ຕຣັກ Nguyen Trung Truc). ພໍຕົກຍາມແລ້ງ ຂອງປີ 1861 ຜູ້ທີ່ມີຊື່ສຽງທີ່ສຸດໃນບັນດາຜູ້ນໍາເຫລົ່ານີ້ ຄື ຕຣອງກົງ ດິນຫ໌ ໄດ້ລະດົມພົນກອງທັບອາສາສະຫມັກ ມີ ທະຫານປະມານນຶ່ງຫມື່ນຄົນເພື່ອທໍາການຕໍ່ສູ້ກັບຝຣັ່ງ. ຄວາມຕື່ນຕົວທາງດ້ານການເມືອງໃນພາກໃຕ້ ໄດ້ຮັບການຊຸກຍູ້ຕື່ມໃນຊຸມປີ 1860 ດ້ວຍຊື່ສຽງອັນໂດ່ງດັງຂອງ" ສົງຄາມປາກກາ" (ຟອຍພູກັນ) ລະຫວ່າງບັນດິດພາກໃຕ້ ສອງຄົນ ຄື ຕັນໂຖ ຕວງ ກັບ ຜັນວັນ ຕຣີ (Tong Tho Tuong & Phan van Tri) ຕວງ ໄດ້ຮ່ວມມືກັບ ຝຣັ່ງ ທໍາຫນ້າທີ່ຮັບໃຊ້ຝຣັ່ງເປັນພະນັກງານຊັ້ນແຂວງ ແລະເປັນຄົນ ກາງທາງການເມືອງ. ສ່ວນອີກ ຜູ້ນຶ່ງຄື ຕຣີ ຊໍ້າສວຍໃຊ້ຮີດຄອງຄໍາສອນຂົງຈື ທີ່ວ່າ"ເສນາບໍດີຜູ້ພັກດີ ຍ່ອມບໍ່ຮັບໃຊ້ເຈົ້ານາຍ ສອງຝ່າຍ" ຈຶ່ງປະຕິເສດຝຣັ່ງທີ່ເຊີນໃຫ້ເຂົ້າເຮັດວຽກກັບລັດຖະບານອານານິຄົມ ໂກແຊງຊິນ. ບຸກຄົນທັງສອງຂຽນຕອບໂຕ້ກັນເປັນບົດກະວີ ອັນຄົມຄາຍ ເຕັມໄປດ້ວຍຄາລົມ ອ້າງເຫດຜົນເພື່ອປ້ອງກັນຖານະຂອງຕົນ ທີ່ຮ່ວມມື ແລະຕໍ່ຕ້ານໃນຮູບວາທະສົງຄາມແບບລ້າງຜານ ແບບບໍ່ແມ່ນຈົດຫມາຍຕິດຕໍ່ສ່ວນຕົວ ແຕ່ຫາກເປັນການສະເຫນີຂໍ້ປະຊຸາມະຕິຂອງຊົນຊັ້ນປົກຄອງພາກໃຕ້ທັງຫມົດ. ໃນຖານະເປັນນັກແກ້ໂຕຜູ້ຍອດຍ້ຽມແຫ່ງພາກໃຕ້ ໃນເລື່ອງກ່ຽວກັບການຮ່ວມມືກັບຝຣັ່ງ, ຕວງ ໄດ້ປຽບທຽບຕົນເອງໃສ່ກັບແມ່ຍິງຊື່ ຊັນ ຟູເຈນ (San Fu-jen) ໃນນິຍາຍ ຈີນ ສະໄຫມກາງ ເລື່ອງ ນິຍາຍຮັກ ຂອງສາມອານາຈັກ (Romance of the Three Kingdoms San Kue chih yen i) ຜູ້ທີ່ຈໍາ ຕ້ອງຢູ່ກັບຜົວຂອງນາງ(ຄົນຝຣັ່ງ) ເຖິງວ່າເຂົາເປັນ ສັດຕູໂຕຮ້າຍຂາດຂອງພໍ່ ກໍຕາມ (ລາຊະສໍານັກ ຫວຽດນາມ) ໃນທາງປີ້ນກັນ ຕຣີ ໄດ້ຂຽນບົດກະວີຕອບໂຕ້ ໄປວ່າພັນທະຂອງແມ່ຍິງທີ່ມີຕໍ່ຜູ້ເປັນສາມີຂອງນາງ ແລະພັນທະຂອງຂອງບຸລຸດນຶ່ງຕໍ່ສິນທໍາທາງການເມືອງຂອງເຂົານັ້ນ ແມ່ນເລື່ອງທີ່ນໍາມາປຽບທຽບກັນບໍ່ໄດ້ເລີຍ ແລະວ່າການໃຊ້ນິຍາຍພື້ນເມືອງ ເລື່ອງສາມອານາຈັກຂອງຕວງນັ້ນແມ່ນເພື່ອບິດເບືອນ ຫລືເສກສັນປັ້ນແຕ່ງເລື່ອງປະຫວັດສາດເພື່ອຍືດການຊົມໃຊ້ເວລາ ເປັນເລື່ອງບໍ່ຫນ້າເຊື່ອຖືເລີຍ.

ນັບແຕ່ຊຸມປີ 1870 ເຖິງຊຸມປີ 1890 ໃນຫວຽດນາມພາກເຫນືອແລະພາກກາງ ພວກປັນຍາຊົນລະດັບແຂວງຫວັ່ນໄຫວໄປມາລະລະຫວ່າງ ການປົດປ່ອຍ ຄວາມເຂົ້າໃຈຜິດດ້ານປັດຊະຍາກັບ ພະຍາດຢ້ຽ້ານ

ຈີນ ຂອງພວກເຄື່ອນໄຫວຕໍ່ຕ້ານກາໂທລິກ. ທ່ານເຈົ້າແຂວງທີ່ເປັນນັກຂຽນອາລົມອ່ອນໄຫວທີ່ສຸດຄົນນຶ່ງ ໃນບັນດານັກຂຽນຂອງຫວຽດນາມເມື່ອຊຸມປີ 1880 ຊື່ ຫງຽວນ ຂວຽນ (Nguyen Khuyen) ເບິ່ງການ ຫລົ້ມສະຫລາຍຂອງລາຊະສຳນັກວຽດນາມວ່າ ໃນດ້ານຄວາມຕ່ຳຕ້ອຍທາງ ເຕັກໂນໂລຊີແລ້ວ ບໍ່ຫນັກ ຫນ່ວງເທົ່າກັບຄຳສັ່ງສອນດ້ານສິນທຳອັນແປກປະຫລາດ ໂດຍສະເພາະເມື່ອມາຮອດປີ 1885 ຝຣັ່ງ ໄດ້ຍຶດ ຄອງເຂດແບ່ງແຍກຕ່າງໆຂອງ ຫວຽດນາມ ບໍ່ແມ່ນດ້ວຍການບຸກໂຈມຕີ ແຕ່ດ້ວຍວິທີຕົບເອົາໂຄງສ້າງ ແບບດັ້ງເດີມແຫ່ງຄວາມຊື່ສັດທາງການເມືອງ ເຊິ່ງແຕ່ໃດໆມາບໍ່ເຄີຍຖືກແຕະຕ້ອງເລີຍ ທັງໆທີ່ລັດພວມ ສູນເສຽອະທິປະໄຕຂອງຕົນໄປ. ທັງນີ້ຍ້ອນວ່າຈົນຮອດປີ 1885 ການຕໍ່ຕ້ານຝຣັ່ງຢ່າງເຂັ້ມແຂງຈິງຈັງ ມັກ ຫມາຍເຖິງຄວາມບໍ່ຈົງຮັກພັກດີ ຕໍ່ລາຊະສຳນັກທີ່ຍັງນິຍົມການເຈລະຈາຢູ່. ເມື່ອວິໄຈເບິ່ງເລື່ອງການຍຶດ ຄອງແລ້ວ ຫງຽວນ ຂວຽນ ໄດ້ເນັ້ນຍ້ຳໃສ່ຄວາມແຕກຕ່າງທີ່ນັບມື້ນັບຫລາຍຂຶ້ນ ລະຫວ່າງ ຮູບແບບ (ພວກຂຸນນາງມັນດາຣິນພ້ອມປຶ້ມອ່ານ ຂອງພວກເຂົາ ເສື່ອຍາມ ແລະກາຈ້ຳ ທີ່ຍັງບໍ່ຖືກແຕະຕ້ອງ) ກັບ ຄວາມເປັນຈິງ (ມັນໄດ້ສູນເສຽ ທັງອຳນາດ ແລະຄວາມເປັນເລີດທາງສິນທຳທີ່ສົມມຸດໄວ້). ດັ່ງທີ່ທ່ານ ຂວຽນ ໄດ້ເວົ້າກ່ຽວກັບຕົນເອງໃນ ປຶ້ມຊື່ *"ເຍາະເຍີ້ຍຕົນເອງ"* ທີ່ໂດ່ງດັງ ຂຽນຂຶ້ນລະຫວ່າງປີ 1885 ວ່າ *"ເມື່ອຂ້າພະເຈົ້າອ້າປາກ, ຂ້າພະເຈົ້າກໍເວົ້າຢ່າງເຂັ້ມແຂງ ແລະດ້ວຍສິດອຳນາດຂອງຜູ້ຂຽນປຶ້ມ. ແລະໃນ ຂະນະນັ້ນ ພິສົບອັນອ່ອນນິ່ມຂອງຂ້າພະເຈົ້າ ກໍສາມາດດູດດື່ມເອົາຂ້າພະເຈົ້າລົງໄປສູ່ຄວາມມົວເມົາ. ເມື່ອ ຂ້າພະເຈົ້າຄຶດເຫັນຕົນເອງແລ້ວ ຂ້າພະເຈົ້າຍິ້ດຽດໂຕເອງທີ່ສຸດ ແມ່ນລະ ເຖິງວ່າມີສິ່ງເຫລົ່ານີ້... ຊື່ສຽງ ຂອງຂ້າພະເຈົ້າ ກໍໄດ້ປາກົດອອກໃນບາບຊີຄຳຂອງການສອບເສັງ"*

ຫລັງຈາກການສະຫວັນນະຄົດຂອງພະເຈົ້າ ຈັກກະພັດ ຕູ ດັກ (Tu-duc) ໃນປີ 1883 "ພັກສົງ ຄາມ" ຕໍ່ຕ້ານຝຣັ່ງ ຂອງພວກຂ້າລາຊະການ ອອກຫນ້າໂດຍ ຜູ້ສຳເລັດລາຊະການຜູ້ເຂັ້ມແຂງ ຊື່ ຕົ໋ງ ຖັດ ຖວາດ (Tong That Thuyet) ກໍໄດ້ເປັນຜູ້ບັນຊາການ ທາງການເມືອງປະຈຳລາຊະສຳນັກ ວຽດນາມ. ຖວາດ ກັບພັກພວກ ໄດ້ກີດກັນບໍ່ໃຫ້ພວກລັດຊະທາຍາດຫນຸ່ມ ຂຶ້ນເປັນຈັກກະພັດ (ດັດ-ດັກ, ຮຽບຫວາ, ກຽນ ຟຸກ Duc-duc, Hiep -hoa, Kien-phuc) ລະຫວ່າງປີ 1883-1884 ແຕ່ບໍ່ສາມາດຍັດຂວາງການ ສະຖາປະນາລັດໃນອາຣັກຂາຂອງ ຝຣັ່ງ ຫວຽດນາມເຫນືອ ແລະ ພາກກາງໄດ້. ເຖິງແນວໃດກໍດີ ໃນເດືອນ ກໍລະກົດ ປີ 1885 ຫລັງຈາກການໂຈມຕີແບບສາຍຟ້າແລບອັນປະລາໄຊ ເພື່ອຕໍ່ຕ້ານຂ້າຫລວງໃຫຍ່ ຝຣັ່ງ ຄົນທຳອິດປະຈຳຫວຽດນາມພາກກາງ, ຖວາດ ໄດ້ຫນີອອກຈາກ ເມືອງເຫ້ ພາເອົາ ຫາມ ຍີ່ (Ham-nghi) ລາຊະບຸດຈັກກະພັດໄປນຳ. ເຂົາໄດ້ໃຫ້ ລາຊະບຸດ ຫາມ ຍີ່ ອອກພະລາຊະໂອງການຮຽກຮ້ອງ ໃຫ້ມີການຕໍ່ຕ້ານຂຶ້ນໃນທົ່ວແຂວງ ເຖິງແມ່ນວ່າ ຝຣັ່ງ ຈະຈັບ ຫາມຍີ່ ໄດ້ເມື່ອປີ 1888 ແຕ່ກໍໄດ້ສົ່ງພະອົງ ໄປລີ້ໄພຢູ່ປະເທດອານເຊຣີ ແລະຫາລັດຊະ ທາຍາດ ອົງໃຫມ່ ມາຂຶ້ນເປັນຈັກກະພັດທີ່ເມືອງເຫ້ (ດົ໋ງ-ຂັ໋ນ, Dong-khanh1885-1889). ໃນທີ່ສຸດພະລາຊະໂອງການນັ້ນກໍຊັກດຶງພວກຄົນຊັ້ນສູງໃນແຂວງມາເຂົ້າຮ່ວມ ປະຕິບັດການນຳ. ຂະບວນການຕໍ່ຕ້ານ ຝຣັ່ງ ຂອງພວກເຂົາເຊິ່ງແຮກກໍ່ມາໃນປີ 1885 ແລະຕໍ່ມາໄດ້ໂຮມ ເຂົ້າກັບການຕໍ່ສູ້ຂອງພວກຊາດນິຍົມໃຫມ່ ໄດ້ໂຮມກັນເຂົ້າໃນລະຍະທຳອິດ ພາຍໃຕ້ຄຳຂວັນວ່າ "ຊ່ອຍເຈົ້າ ຊີວິດ" (ກັນວູຢົ໋ງ) (aid the king/can vuong) ເປັນການປັບແປງເອົາແນວຄຶດ ຈີນ-ຫວຽດນາມ ຂອງ ຄວາມສຳນຶກ ແບບຈີນ ທີ່ມີມາດົນກວ່າຊາວສະຕະວັດແລ້ວ.

ຜູ້ນຳທີ່ມີຊື່ສຽງທີ່ສຸດສອງຄົນ ແຫ່ງຂະບວນການຕໍ່ຕ້ານ ຝຣັ່ງ ຢູ່ຂັ້ນແຂວງແມ່ນ ຟັນ ດິນ ຟຸ໋ງ (Phan Dinh Phung) ຢູ່ເຂດ ຣາທິນ (Ha Tinh) ແລະ ຮວ໋ງຣາ ທັມ (Hoang Hoa Tham) ໃນເຂດພູດອຍພາກເຫນືອ. ຂະບວນການພັນທະພາບ"ຊ່ອຍເຈົ້າຊີວິດ" ມີສອງລັກສະນະຄວບກັນ ຄືທັ໋ງ ດ້ານອຸດົມການ ແລະ ການເມືອງຊົນຊາດຊົນເຜົ່າ. ຈິດໃຈຂອງຂະບວນການ ແມ່ນ " ກຳຈັດ ສາສະຫນາ ແລະ ຂັບໄລ່ຝຣັ່ງອອກໄປ", ຈຸດປະສົງອັນທຳອິດບັນລຸຄວາມສຳເລັດ ໂດຍການເຊັ່ນຂ້າຊາວ ກາໂທລິກ ວຽດນາມ ຢ່າງບໍ່ເລືອກຫນ້າ. ຂະບວນການຕ່າງໆເຊິ່ງສ່ວນໃຫຍ່ອາໄສຜູ້ນຳເປັນຕົ້ນຕໍໄດ້ຖືກແບ່ງແຍກ ອອກໄປຕາມພື້ນທີ່. ຂ້າລາຊະການຊັ້ນສູງຂັ້ນແຂວງນັ້ນ ຕອບສະຫນອງຕໍ່ ຄວາມ ຮູ້ສຶກ" ຊ່ອຍເຈົ້າຊີວິດ"

ຫນ້ອຍກວ່າພວກຂຸນນາງໃນເຂດຮອບວົງນອກຂອງລະບົບອາດຍາສິດ ເຊັ່ນ ພວກພໍ່ບ້ານ ຜ້າລາຊະການ ເກົ່າ ນັກສຶກສາ ທີ່ຜ່ານສອງລະບອບສອບເສັງ. ຢ່າງຫນ້ອຍຢູ່ໃນ ຫ້າແຂວງ ເຈ້ົາແຂວງ ແລະກໍາມະການ ຝ່າຍການເງິນ ແລະຝ່າຍຍຸຕິທໍາ ໄດ້ຫລົບຫນີ, ຖືກຈັບ ຖືກຂ້າຕາຍແດ ໂດຍພວກ" ຂ່ອຍເຈ້ົາຊີວິດ". ຜົນສະທ້ອນອັນນຶ່ງຂອງຂະບວນການລາຊານິຍົມແຫ່ງປີ 1885 ຈຶ່ງເປັນຄື ພາວະຫັນໃຈປາຂອງລະບອບ ການປົກຄອງປະຈໍາທ້ອງຖິ່ນ ເຊິ່ງນັກອານານິຄົມ ຝຣັ່ງ ບໍ່ເຄີຍສາມາດຟື້ນຟູຄືນມາໃຫ້ສົມບູນໄດ້ອີກຢ່າງ ມີຄຸນນະພາບ. ຜົນສະທ້ອນທີ່ເປັນໂຊກມະຫັນອັນທີສອງ ຂອງຂະບວນການ ແມ່ນຄວາມຫນັກຫນ່ວງດ້ານ ປະເພນີຄາໂທລິກຂອງຊາວຫວຽດນາມແລະຄວາມ ຮູ້ສຶກກ່ຽວກັບການແບ່ງແຍກ.

ຂະບວນການ"ຂ່ອຍເຈ້ົາຊີວິດ" ໄດ້ເນັ້ນເອົາເລື່ອງຊົນຊາດຊົນເຜົ່າເປັນໃຈກາງ ໂດຍບໍ່ມີແນວຄຶດ ຫລັກທີ່ແທ້ຈິງກ່ຽວກັບຫວຽດນາມໃນຖານະລັດ-ຊາດນຶ່ງ (nation-state) ເພື່ອຊ່ວງເສັງກັບລັດຊາດ ອື່ນໆ. ເຖິງແນວໃດກໍດີ ລັດທິຊາດນິຍົມອັນແທ້ຈິງ ໄດ້ພົ້ນໂຜ່ຂຶ້ນລຸນຫລັງປີ 1900 ໂດຍໄດ້ຮັບຈິນຕະນາການຈາກ ວິຖີທາງຂອງຈີນ. ພໍມາຮອດ 1900 ບົດປະພັນຂອງ ຣຸຊໂຊ (Rousseau), ໂວນແຕຣ (Voltere) ແລະມົງ ແຕສກີເອີ (Montesquieu) ກັບພວກສັງຄົມນິຍົມດາຣວິນເຊັ່ນ ເຮີເບີຕ ສະແປນເຊີ (Herbert Spencer) ໄດ້ເລີ່ມປາກົດຕົວອອກໃນ ຈີນ ໃນຮູບແບບວັນນະຄະດີພາສາຈີນແປທີ່ຍ້ຽມຍອດ. ເນື່ອງຈາກບັນດິດຊາວ ຫວຽດນາມ ສ່ວນຫລາຍອ່ານວັນນະຄະດີຈີນໄດ້ຢ່າງດີ ແຕ່ເກືອບບໍ່ໄດ້ອ່ານເລີຍ ໃນພາສາ ເອີຣົບ, ດັ່ງນັ້ນ ທໍາອິດ ພວກເຂົາຈຶ່ງຮູ້ຈັກແນວຄຶດແບບເອີຣົບ ຜ່ານວັນນະຄະແປໂດຍປັນຍາຊົນຈີນເຊັ່ນ ເຢນ ຟູ(Yen Fu). ໂດຍສະເພາະແລ້ວມີນັກອຸດົມການຈີນສອງຄົນທີ່ມີຊື່ສຽງໂດ່ງດັງຫລາຍໃນຫວຽດນາມ ເມື່ອຕົ້ນຊຸມປີ 1900 ຍ້ອນຜົນງານການຂຽນຫລາຍຢ່າງເຊັ່ນ ກວັງ ຢູ ເວ ແລະ ຫລຽງ ຊີ ສາວ (K'ang Yu-wei,Liang Ch'i-ch'ao) ເຊິ່ງ ເປັນຜູ້ນໍາພາຂະບວນການປະຕິຮູບ ທີ່ປະລາໄຊ ຢູ່ ປັກກິ່ງ ປີ 1898. ຜົນງານການຂຽນຂອງ ຫລຽງ ແນ່ນອນ ໄດ້ເປັນແຫລ່ງຂໍ້ມູນສໍາລັບນັກປາດບັນດິດວຽດນາມບາງຄົນໃນຂະນະນັ້ນ ທີ່ຮູ້ສຶກຕື່ນຕົວ ວ່າ ໂລກຫນ່ວຍນີ້ ບໍ່ທ່ອນຢູ່ທີ່ຄວາມສາມັກຄີປົກຄອງໂດຍບຸກຄົນທີ່ບໍ່ສະເຫມີກັນ ຄືດັ່ງທີ່ພວກເຂົາເຄີຍຄຶດ ໄວ້, ແຕ່ຫາກເປັນສະຫນາມຮົບແຫ່ງການຊ່ວງເສັງລະຫວ່າງຊາດແຂງແຮງ ກັບຊາດອ່ອນແອ ແຕ່ກໍເປັນ ຊາດນຶ່ງ ເທົ່າທຽມກັນຕາມກົດຫມາຍ. ຕົວຢ່າງຂອງ ຫລຽງ ຊ່ອຍໃຫ້ ນັກປະຕິຮູບຫວຽດນາມ ປະຖິ້ມ ທັດສະນະແບບຂົງຈື້ ແລະຊ່ອຍໃຫ້ຮັບຮອງເອົາ ແນວຄຶດສັງຄົມນິຍົມແບບດາຣວິນ (Darwinist). ນີ້ແມນ ການເລີ່ມຕົ້ນຄັ້ງສໍາຄັນ ຂອງການປ່ຽນ ແປງດ້ານຄ່ານິຍົມ.

ສອງຍັກໃຫຍ່ ແຫ່ງວົງການການເມືອງຂອງພວກຊາດນິຍົມໃນລະຍະທໍາອິດ ແມ່ນ ຟັນ ໂບຍ ເຈົ້ໍ (Phan Boi Chau, 1867-1940) ແລະ ຟັນ ເຈົ້ໍ ຕຣິນ (Phan Chau Trinh,1871- 1926) ທັງສອງມາຈາກທ້ອງຖິ່ນຕ່າງກັນ ທັງຍັງຕ່າງກັນອີກໃນຈຸດສໍາຄັນຄື ເຈົ້ໍ ຫລົ້ນກັບພວກ ລາຊາທິປະໄຕ ປະຕິວັດ ຂະນະທີ່ ຕຣິນ ກາຍເປັນນັກປະຊາທິປະໄຕຕໍ່ຕ້ານລາຊາທິປະໄຕ, ເຈົ້ໍຜູ້ເກີດໃນຕະກູນນັກປາດ ບັນດິດຂົງຈື້ ໄດ້ຈັດຕັ້ງກອງທະຫານຊື່ "ຂ່ອຍເຈ້ົາຊີວິດ" ຂຶ້ນໃນປີ 1885 ແລະໃນອີກຄວາມຫມາຍນຶ່ງ ກໍແມ່ນ ຂົວຂ້າມໄປສູ່ຍຸກຊາດນິຍົມໃນພາຍຫລັງ. ເຖິງແມ່ນວ່າເຂົາໄດ້ຜ່ານລະບອບສອບເສັງ ແລະສອບ ເສັງໄດ້ໃນເຂດປະຈໍາພາກໃນປີ 1900 ແຕ່ເຂົາກໍຕົກຢູ່ພາຍໃຕ້ຄໍາບົງການ ຂອງ ຫລຽງ ຊີ ສາວ (Liang CH'i-ch'ao), ໂດຍໄດ້ດໍາເນີນການສູ້ຢັນຕໍ່ຕ້ານອານານິຄົມຢູ່ຕະຫລອດຊີວິດ. ໃນລະຫວ່າງປີ 1902-03 ເຂົາໄດ້ຂຽນປຶ້ມ ສະແດງຄວາມຄຶດເຫັນເລື່ອງ" ປຶ້ມເຫລັ້ມໃຫມ່ກ່ຽວກັບ ນ້ໍາຕາເລືອດ ຂອງຫມູ່ເກາະຣີວກຸ (The Tears of Blood of the Ryukyu Islands)ບາງທີອາດແມ່ນປຶ້ນເຫລັ້ມທໍາອິດ ຂຽນຂຶ້ນໃນ ວຽດ ນາມ ທີ່ສະແດງອອກເຖິງແນວຄຶດຊາດນິຍົມທີ່ວ່າ ຊາວວຽດນາມທຸກຄົນລ້ວນເປັນເພື່ອນຮ່ວມຊາດ ທີ່ຕ້ອງ ສາມັກຄີກັນເພື່ອຄວາມຮັກຕໍ່ປະເທດຊາດ. ໃນຂະນະດຽວກັນ ແບບຢ່າງໂດຍທາງອ້ອມຂອງຊາວ ເກາະຣີວ ຢູກູ ເຊິ່ງຖືກ ຍີ່ປຸ່ນ ຍຶດຄອງຫວ່າງບໍ່ດົນມານີ້ ກໍໄດ້ຖືກຊົມໃຊ້ເພື່ອຊັກຊວນເອົາສະມາຊິກອື່ນໆຂອງຊົນຊັ້ນ ຂຸນນາງແມນດາຣິນ ຜົນຜະລິດແຫ່ງ ອະກຸສົນລະກໍາຈາກການສູນເສຽເອກະລາດ. ໃນປຶ້ມອີກເຫລັ້ມນຶ່ງຊື່ "ການສັກກາລະ ສັດຕະບຸລຸດ"(Idolizing Beautiful Personages) ເຈົ້ໍເວົ້ໍາໂຍກຍ້ອງເລື່ອງຂອງຊອກ

ເຊີ ວໍຊິງຕັນ ໂດຍອ້າງເຫດຜົນວ່າ ວໍຊິງຕັນ ເຄີຍເປັນທະຫານໃນກອງທັບອັງກິດມາກ່ອນ ດັ່ງນັ້ນເຂົາຈຶ່ງ ສາມາດກຳໄດ້ ວິທີການ ແລະພື້ນຖານອັນເໝາະສົມສຳລັບການສູ້ຮົບ. ສິນທຳຂໍ້ນຶ່ງທີ່ຊາວວຽດນາມນັກ ປະຕິວັດ ຕ້ອງກຳໃຫ້ໄດ້ ແມ່ນພະຍາຍາມແຊກຊຶມເຂົ້າໃນກອງທະຫານອິນໂດຈີນ ເພື່ອເປີດຫູເປີດຕາຊາວ ທະຫານຫວຽດນາມ ຜູ້ໂງ່ຈ້າ ທີ່ຮັບໃຊ້ໃນກອງທັບ ຝຣັ່ງ.

ຫລັງຈາກໄຊຊະນະຂອງ ຍີ່ປຸ່ນ ໃນສົງຄາມ ຣັດເຊຍ- ຍີ່ປຸ່ນ ເມື່ອປີ 1905 ຈົນເຖິງ ລະຫວ່າງປີ 1912, ຕົວຢ່າງອັນໃຫ້ຫນ້າສົ່ງເສີມຂອງຍີ່ປຸ່ນ ສະໄຫມເມຈິ (Meiji) ໃນເລື່ອງຂອງຄວາມກ້າວຫນ້າ ແລະທັນສະໄຫມ ຂອງລະບອບລາຊາທິປະໄຕ ໄດ້ກາຍເປັນຈຸດໂດດເດັ່ນ ຢູ່ໃນແນວທາງການເມືອງ ປະຕິວັດ ຂອງຫວຽດນາມ. ຊາວວຽດນາມອອນຊອນແບບຢ່າງຂອງຍີ່ປຸ່ນຫລາຍໃນເລື່ອງລັດທິຊາດນິຍົມ ແລະການ ທັນປະເທດໃຫ້ທັນສະໄຫມ ປະສົມເຂົ້າກັບການຟື້ນຟູລະບົບລາຊາທິປະໄຕ-ເຊິ່ງບາງທີ ອາດແມ່ນ ອົງຊາຍ ກວາງ ດິ (Cuong De.1822-1951) ລັດຊະທາຍາດອົງນຶ່ງຂອງອົງຈັນ (Prince Canh) ລາຊະບຸດ ອົງໃຫຍ່ຂອງຈັກກະພັດ ເຈຽລອງ (Gia-long) ທີ່ໄດ້ປະພາດຢ້ຽມຢາມນະຄອນປາຣີ ເມື່ອປີ 1787. ໃນຈົດໝາຍ ຕອບໂຕ້ກັບສະບັບນຶ່ງ ທີ່ຂຽນເປັນພາສາຈີນບູຮານ ກວາງ ດິ ໄດ້ປະກາດ ວ່າ ການປົກຄອງ ຂອງຝຣັ່ງຢູ່ຫວຽດນາມ ບໍ່ແມ່ນສິ່ງຖາວອນ ແລະວ່າ ກອງທັບຍີ່ປຸ່ນ ຈະຊ່ວຍພະອົງ ກອບກູ້ປະເທດຊາດ. ມາເຖິງປີ 1908 ນັກສຶກສາຫວຽດນາມ 200 ຄົນ ໄປປະເທດຍີ່ປຸ່ນ ເພື່ອເຂົ້າສຶກສາ ຢູ່ມະຫາວິທະຍາໄລ ຍີ່ປຸ່ນ. ກະໂຕ ຝັ້ນ ໂບຍ ເຈົ້າ ເອງ ເຊິ່ງເວລານັ້ນ ເປັນຫົວຫນ້າຂອງກຸ່ມການເມືອງ ທີ່ຮູ້ຈັກກັນໃນນາມ "ການຟື້ນຟູສັງຄົມ" (ດຸຍ ຕັນ ຮວຍ Duy Tan Hoi-Renovation Society) ໄດ້ລິເລີ່ມ "ຂະບວນ ການເດີນທາງສູ່ຕາເວັນອອກ" (ດົງ ດູ Dong Du) ໂດຍໄປ ເຖິງຍີ່ປຸ່ນ ໃນປີ 1905. ໃນທັນທີ ເຂົາກໍໄປຢູ່ ພາຍໃຕ້ການສິດສອນດູແລຂອງ ຫລຽງສີ ສາວ ເຊິ່ງກຳລັງ ລີ້ໄພຢູ່ຍີ່ປຸ່ນ ໃນຖານະປັນນາທິການຫນັງສື ພິມພາສາຈີນ ພິມອອກໃນຍີ່ປຸ່ນ ແລະດ້ວຍການຊ່ວຍເຫລືອຂອງ ຫລຽງຝັ້ນ ໄດ້ຂຽນປະຫວັດສາດການສູນ ເສຍເອກະລາດເມື່ອມໍ່ໆມານີ້ຂອງຫວຽດນາມ. ປຶ້ມເຫລັ້ມນີ້ຖືກລັກລອບນຳເຂົ້າມາໃນ ຫວຽດນາມ ໂດຍນັກ ສຶກສາຜູ້ກັບຄືນມາ ແລ້ວຕັ້ງອົງການລັບໃຕ້ດິນປະຈຳເຂດສາຂາຂອງ "ການຟື້ນຟູສັງຄົມ" ຂຶ້ນຢູ່ທີ່ ໄຊງ່ອນ ຣານອຍ ມາຍໂຖ ແລະບ່ອນອື່ນໆ ທີ່ດຳເນີນການ ພາຍໃຕ້ຮູບການໂຮງແຮມ, ສະຫະກອນທຸລະກິດ ແລະສະມາຄົມຍັ້ນບ້ານ. ການແປກປອມແບບນີ້ມີຈຸດປະສົງຫລອກລວງຕາຕຳຫລວດລັບຂອງອານານິຄົມ ເຊິ່ງສຳລັບພວກເຂົາແລ້ວ ເສລີພາບ ແລະພະລາດອນພາບບໍ່ອາດແມ່ນແນວຄຶດທີ່ຍອມຮັບໄດ້ໃນຫວຽດ ນາມ.

ຂະບວນການ ດົງ ດູ ເອງກໍສູນເສຍພະລັງເຄື່ອນເຫນັງຂອງຕົນໄປໃນປີ 1908 -1909 ເມື່ອລັດຖະ ບານຍີ່ປຸ່ນ ເຊິ່ງ ເພື່ອໂຕ້ຕອບກັບຄວາມກົດດັນທາງການທູດຂອງຝຣັ່ງ ໄດ້ຂັບໄລ່ນັກສຶກສາ ຫວຽດນາມ ອອກຢ່າງເປັນທາງການ. ແຕ່ຈຸດສຸດຍອດອັນແທ້ຈິງຂອງການກໍ່ກວນຕອນຕົ້ນໆຂອງລັດທິຊາດນິຍົມວຽດ ນາມ ບໍ່ໄດ້ມາແຕ່ຍີ່ປຸ່ນ ແຕ່ມາຈາກ ຣາໂນຍ ດ້ວຍການໄຂໂຮງຮຽນ ກິນ ດົງ ຟຣີ (Dong Kinh Free school) ທີ່ມີຊື່ສຽງໂດ່ງດັງຢູ່ຫັ້ນ ເມື່ອເດືອນມີນາ 1907. ແນ່ນອນວ່າ ໂຮງຮຽນ ກິນ ດົງຟຣີ ເປັນຂີດ ໝາຍສຳຄັນນຶ່ງຂອງຜູສັນປັນນ້ຳ ແຫ່ງການປະຕິວັດ ຫວຽດນາມ ສະໄຫມໃຫມ່. ໃນຖານະເປັນສະຖາບັນ ນຶ່ງ ມັນແມ່ນການເຮັດຕາມແບບຢ່າງຂອງ ວິທະຍາໄລ ເກອິໂອ(Keio School) ຂອງຍີ່ປຸ່ນ ເຊິ່ງຕໍ່ມາໃນປີ 1868 ໄດ້ກາຍມາເປັນມະຫາວິທະຍາໄລ ເກອິໂອ ຢູ່ໂຕກຽວ, ສະຖາບັນນີ້ເປັນມະຫາວິທະຍາໄລ ແຫ່ງ ທຳອິດ ຂອງວຽດນາມ. ບໍ່ມີການເສຽຄ່າໃດໆ ສຳລັບການສຶກສາຂອງທຸກຄົນທີ່ມາຮຽນ ຄ່າໃຊ້ຈ່າຍຂອງ ໂຮງຮຽນ ມາຈາກຄອບຄົວຊົນຊັ້ນນຳຜູ້ຮັກຊາດ ຢູ່ພາກເຫນືອຂອງປະເທດຫວຽດນາມ. ໃນຍຸກຮຸ່ງເຮືອງ ທີ່ສຸດ ມະຫາວິທະຍາໄລ ດົງດູດເອົານັກສຶກສາ ໄດ້ຮອດພັນຄົນ. ມີການແບ່ງວິຊາຮຽນອອກເປັນຫລາຍ ຄະນະ ຄື "ການສຶກສາ", "ວັນນະຄະດີ", ເສດຖະກິດ ແລະອັນສຳຄັນຫລາຍ ແມ່ນ "ວິຊາການ ໂຄສະນາ" ມະຫາວິທະຍາໄລ ດຳເນີນການມາໄດ້ບໍ່ຮອດປີ ພວກກຳອຳນາດການປົກຄອງ ຝຣັ່ງ ກໍໄດ້ຍຸບມັນລົງ ເມື່ອ

ເດືອນພະຈິກປີ 1907, ທັງຈັບກຸມພວກຫົວຫນ້າບາງຄົນໄປ ແລະເນລະເທດໄປກັກຂັງຢູ່ ດອນ ປູໂລ ກົງດໍເຣ (Poulo Condore).

ເພື່ອສະແດງອອກເຖິງ ລັດທິຄຳສັ່ງສອນກ່ຽວກັບການປະຕິວັດ ທາງ ວັດທະນະທຳ ໃນຮູບແບບ ທີ່ຄັດຮ່ອນມາແລ້ວ ພວກຄູສອນຢູ່ໂຮງຮຽນ ດົງ ກິນ ຟຣີ ກໍເລີ່ມພາລະກິດຂອງພວກເຂົາ ດ້ວຍການໂຈມຕີ ການໃຊ້ອັກສອນຈີນ ໃນ ຫວຽດນາມ, ພວກຄູສອນເຫລົ່ານີ້ຮຽກຮ້ອງໃຫ້ໃຊ້ອັກສອນ ຫວຽດນາມ ແບບດັດ ແປງຈາກອັກສອນ ໂຣມັນແທນ ເພາະຈະເອື້ອອຳນວຍໃຫ້ຄົນຊັ້ນສູງສອນຫນັງສືໃຫ້ພວກຊາວນາ ຫວຽດ ນາມໄດ້ ແລະຈາກນັ້ນ ກໍສື່ສານກັບພວກເຂົາໄດ້ນຳ ແລ້ວຕໍ່ມາກໍຈະໄດ້ຮັບການສະຫນັບສະຫນຸນຈາກມວນ ຊົນທີ່ຢູ່ຫ່າງໄກກັນມາດົນ ຕາບໃດທີ່ພວກເຂົາຫາກໂດດດ່ຽວຕົນເອງດ້ວຍການຂຽນອັກສອນ ຈີນບູຮານ ທີ່ມີຜູ້ຮູ້ນ້ອຍນັ້ນຢູ່ຕໍ່ໄປ. ພວກຄູສອນໂຮງຮຽນ ດົງກິນ ຟຣີ ຍັງໄດ້ໂຈມຕີການສອບເສັງເຂົ້າເຮັດການພົນລະ ເຮືອນແບບຂົງຈື້ ນຳ ທີ່ສືບທອດວັດທະນະທຳຂອງຊົນຊັ້ນສູງ ແບບບໍ່ເຂົ້າກັບກາລະເທສະ ແລະ ຜະລິດ ຊົນຊັ້ນຂຸນນາງແມນດາຣິນຜູ້ປອດຈາດລັດທິຊາດນິຍົມ ແລະ ຜູ້ທີ່ອາດຈະໄປຮັບໃຊ້ ເປັນຕົວຫຸ່ນໃຫ້ ລາຊະ ສຳນັກ ແລະຕໍ່ມາຮັບໃຊ້ພວກອານານິຄົມ. ເນື່ອງຈາກສະຖານັນ ຕາມປະເພນີເຫລົ່ານັ້ນຖືກ ຝຣັ່ງ ຍຶດຫມົດ ແລ້ວ ຈຳເປັນຕ້ອງເບິ່ງຂ້າມໄປ. ແມ່ນວ່າ ການຜິກປັ້ນຄືນມາຫາຄ່ານິຍົມຢ່າງກະທັນຫັນ ໃນຕົວຈິງ ຫົວຫນ້າໂຮງຮຽນ ລອງ ວັນ ຈັນ ເອງ ກໍມີປະກາດໄຊຍະບັດ ຈາກລະບົບການສອບເສັງ ທີ່ເຂົ້າພວມ ໂຈມຕີ. ເຖິງແມ່ນວ່າ ລະບົບການສອບເສັງຍັງຄົງມີຢູ່ຕໍ່ມາຈົນຮອດປີ 1918-1919 ມັນກໍເຖິງກາລະອະວະ ສານ ຢ່າງກະທັນຫັນ ໃນປີ 1907 ໂດຍ ບັນດິດທັງຫລາຍແຫ່ງ ດົງ ກິນ ຜູ້ເຊິ່ງ ບັດນີ້ ໄດ້ຫລໍ່ຫລອມ ທັດສະນະຂອງນັກສຶກສາຜູ້ທີ່ເອົາຈິງເອົາຈັງກວ່າຫມູ. ແຜນການຂອງໂຮງຮຽນ ດົງ ກິນ ຟຣີ ບໍ່ໄດ້ຍົກເວັ້ນ ນັກກິດຈະກຳຕໍ່ຕ້ານອານານິຄົມ ເຊັ່ນ: ຫງຽນ ກູເຢັນ ຮອງຜູ້ອຳນວຍການໂຮງຮຽນກັບ ຫມູ່ພວກເຂົາ ຈຳນວນນຶ່ງ ໄດ້ຖືກດຶງເຂົ້າພົວພັນກັບການວາງແຜນໃສ່ຢາເບື່ອ ນາຍທະຫານກອງທັບຝຣັ່ງ ອັນເປັນວິທີ ການຍຶດເອົາເມືອງຮານອຍ. ຍິ່ງໄປກວ່ານີ້ ໂຮງຮຽນ ດົງກິນ ຍັງເປັນຜູ້ລິເລີ່ມການສອນ ກ່ຽວກັບທິດສະດີ ໃຫມ່ອຽມສຸດ ກ່ຽວກັບເລື່ອງຄວາມເປັນຊາດ, ສັນຍາຜູກພັນທາງສັງຄົມ ແລະຄວາມມຸ່ງຫວັງທົ່ວໄປ ແລະ ທິດສະດີແຫ່ງວິວັດທະນາການ. ໂຮງຮຽນຍັງໄດ້ຮຽກຮ້ອງໃຫ້ຮັບເອົາການນຸ່ງຫົ່ມແບບຕາເວັນຕົກ ອັນເຮັດ ໃຫ້ການນຸ່ງຖືແບບເກົ່າ ແຕ່ດົນນານສູນເສຽໄປ. ຄຳເວົ້າຢອກລ້ໍອັນນຶ່ງທີ່ນັກສຶກສາໃນໂຮງ ຮຽນເລົ່າໄດ້ກັບ ປາກ ແມ່ນ: ມືຊ້າຍ ຕ້ອງຈັບຫວີ ມືຂວາຕ້ອງຈັບມີດຕັດ. ບັດນີ້ ຈົ່ງຕັດຂອດຜົມເກົ້າຢ່ຽວ ຄົ້ນເຈົ້າ ອອກໄປ... ເຮັດຫລິ້ນໆ ຫົວໆໄປກໍໄດ້ ງ່າຍໆຈັ່ງຊັ້ນ ສີມືຕັດຜົມຂອງທ່ານກໍຈົ່ງດີຂຶ້ນໆ. ຄວ່າງ ຄວາມໂງ່ຈ້າ ຫລ້າຫລັງຖິ້ມໄປ ຄວ່າງຄວາມປ່ວງບ້າທັງຫລາຍຂອງເຈົ້າຖິ້ມໄປ ມື້ນີ້ ພວກເຮົາຈະຕັດຜົມ ມື້ອື່ນຈະໂກນ ຫນວດເຄົາ".

ຫລັງຈາກການຂັບໄລ່ນັກສຶກສາຫວຽດນາມອອກຈາກ ຍີ່ປຸ່ນ ແລະ ພາຍຫລັງການປະຕິວັດໃນຈີນ ເມື່ອເດືອນຕຸລາ ປີ1911, ແບບຢ່າງແຫ່ງການປ່ຽນແປງທາງດ້ານການປະຕິວັດຂອງ ຈີນ ຍິ່ງເປັນທີ່ດຶງ ດູດໃຈພວກຊາດນິຍົມ ຫວຽດນາມ ຫລາຍຂຶ້ນ. ເດືອນກຸມພາ1912 ຟັນ ບອຍ ເຈົ໋າ ແລະຊາວ ຫວຽດນາມ ຄົນອື່ນໆກວ່ານຶ່ງຮ້ອຍ ທີ່ລີ້ໄພການເມືອງຢູ່ຈີນ ໄດ້ປ່ຽນອົງການ "ການຟື້ນຟູສັງຄົມ" ມາເປັນອົງການຈັດ ຕັ້ງໃຫມ ຊື່ໃນພາສາວຽດນາມວ່າ "ກວງ ຜຸກ ຮອຍ ຫລື ສັງຄົມຟື້ນຊີບ" (Revival Society). ມີການ ລົງຄະແນນສຽງຕົກລົງວ່າ ຈຸດປະສົງຂອງສະມາຄົມນີ້ (ທັງໆທີ່ເຈົ໋າເອງ ຍັງເປັນ ນັກລາຊານິຍົມຢູ່) ຄື ຕ້ອງສ້າງ ສາທາລະນະລັດປະຊາທິປະໄຕຢູ່ຫວຽດນາມ ໃຫ້ຄ້າຍຄືກັບ ສາທາລະນະລັດ ທີ່ ຊຸນ ຍັດ ເຊັ່ນ (Sun Yat-sen) ກຳລັງພະຍາຍາມເຮັດຢູ່ໃນຈີນ. ພວກຜູ້ນຳ ຂອງ ພັກ ກົວ ມິນ ຕັງ (Kuomintang) ຂອງ ຈີນພາກໃຕ້ ເຊັ່ນ ຫູ ຫັນ ມິນ (Hu Han-min) ໄດ້ໃຫ້ການຊ່ວຍເຫລືອດ້ານການ ເງິນແກ່ "ສັງຄົມຟື້ນຊີບ" ອັນສຳຄັນຍິ່ງໄປກວ່ານີ້ ສະມາຄົມ ໄດ້ຕັດສິນໃຈສ້າງ ກອງທັບຂອງຕົນເອງ ເພື່ອປົດປ່ອຍຫວຽດນາມ ໂດຍ ດຶງເອົານາຍທະຫານ ຫວຽດນາມ ທີ່ສຳເລັດການສຶກສາຈາກໂຮງຮຽນ ນາຍຮ້ອຍຢູ່ປະເທດຈີນ ແລະ ຍີ່ປຸ່ນ. ຍຸດທະສາດ ເພື່ອຍຶດຄອງເອົາຫວຽດນາມ ຄືນ ໂດຍຖານທັບຕາມບໍລິເວນຊາຍແດນຈີນ ອັນເປັນ

ສິ່ງເປັນຕາຍຕໍ່ປະຫວັດສາດ ຂອງຝ່າຍຊາດນິຍົມ ຈຶ່ງກໍ່ເກີດຂຶ້ນໃນລະຍະນີ້ເອງ. ແຕ່ທັງໆທີ່ມີໂຊກດີ ເມື່ອປີ 1915 ກົງສຸນເຢຽລະມັນ ໃນສະຫຍາມ ໄດ້ສະໜັບສະໜຸນເງິນ 10,000 ຫຣຽນ (ປຽດສ໌) ແກ່ກອງທັບນັ້ນ ກອງທັງກໍຍັງຢູ່ໃນສະພາບຫຍຸ້ງຍາກຍ້ອນຂາດເຂີນກອງທຶນ. ເຈົ້າ ຕັດສິນໃຈ ເລືອກເອົາການລຸກຮື ທີ່ບໍ່ທັນກຽມພ້ອມ ຢູ່ໃນຫວຽດນາມ ເຖິງແມ່ນວ່າ ມັນບໍ່ປະສົບຄວາມສຳເລັດກໍຕາມ ມັນກໍອາດສະສົມເອົາການໂຄສະນາຫາສຽງໄວ້ໄດ້ພຽງພໍ ເພື່ອປັບປຸງອະນາຄົດທາງການເງິນ. ການໂຈມຕີທີ່ກອງທັບ ເລີ່ມລົງມືໃນປີ 1915 ຈາກພາກໃຕ້ ຈີນ ເພື່ອຕໍ່ຕ້ານກັບຈຸດໃຈກາງຫລາຍແຫ່ງທີ່ເບິ່ງຄືວ່າ ເປັນໄປໄດ້ນັ້ນ ຊ້ຳ ຖືກປະລາໄຊຢ່າງງ່າຍດາຍ (ມົງຈາຍ, ລັນຊອງ) ມັນແມ່ນການຂາດອຳນາດ ຂອງກອງທັບຂອງອົງການສັງຄົມຟື້ນຊີບ ຄື - ທີ່ມີກຳລັງກະແຈກກະຈາຍ ນັບແຕ່ ຢຸນນານ ຮອດ ຮາໂນຍ ນີ້ລະ ທີ່ເປັນ ສະຖານະການອັດຕະວິໄສ ແລະຄວາມຈຳເປັນ ບໍ່ແມ່ນຄວາມສາມາດບິ່ມຊ້ອນ ແຫ່ງການປະຕິວັດ ຂອງຫວຽດນາມ ທີ່ໄດ້ບົ່ງການໃຫ້ເກີດຂະບວນການລຸກຮືຕໍ່ຕ້ານ ໃນປີ 1915.

ຍິ່ງໄປກວ່ານີ້ ກໍແມ່ນ ຜັນ ໂບຍ ຈາວ (Phan Boi Chau) ເອງ ທີ່ເປັນນັກປະຕິວັດແບບຂົງຈື ແລະ ໃກ້ຊິດຕິດແໜດກັບ ເມ່ງຈື ຫລາຍກວ່າ ມົງແຕສະກິເອ ອີກ. ດັ່ງທີ່ເຂົາໄດ້ຂຽນໄວ້ໃນປຶ້ມຊື່ "ແສງສະຫວ່າງແຫ່ງພູມປັນຍາຂົງຈື (ຄົງ ຮອກດັງ Khong hoc dang/The Lamp of Confician Scholarship) ເຂົາຊື່ນຊົມລະບອບປະຊາທິປະໄຕ ແບບບໍ່ຟ້າວຟັ່ງ ດັ່ງໃນນິທານຂອງ ບັນດາຈັກກະພັດຈີນຜູ້ສະຫລາດສະຫລຽວ ຜູ້ທີ່ຍອມຮັບວ່າ ບັນລັງຂອງພະອົງ ເປັນຂອງປະຊາຊົນ ບໍ່ແມ່ນເປັນຂອງພວກພະອົງ. ໃນສາຍຕາຂອງເຂົາ ສິ່ງທີ່ຜິດພາດສຳລັບຫວຽດນາມ ສະໄໝອານານິຄົມ ແມ່ນເລື່ອງທີ່ວ່າ ບໍ່ພຽງແຕ່ບໍ່ສາມາດພັດທະນາປະເທດໃຫ້ທັນສະໄໝເທົ່ານັ້ນ ແຕ່ຍັງຂາດການວາງລະບຽບການດ້ານສິນລະທຳ ແລະ ຣິດປະຕິບັດທາງສັງຄົມນຳອີກ. ບັດນີ້ ປະເທດຊາດມີສິ່ງຊົ່ວຮ້າຍສຸດຂີດຂອງທັງສອງໂລກຄື: ຝຸ່ນຜົງເສດເຫລືອແຫ່ງຈິດວິນຍານຕາເວັນອອກຂອງ "ການປົກຄອງໂດຍມະນຸດ" ໄດ້ສາບສູນໄປ ຕັ້ງແຕ່ດົນນານແລ້ວ, ຂະນະທີ່ລັດທິອານານິຄົມ ຍັງບໍ່ໄດ້ໃຫ້ສະຖາບັນ "ແຫ່ງການປົກຄອງດ້ວຍກົດໝາຍ" ໃດໆ ທີ່ຕ້ອງການແກ່ຫວຽດນາມ ເຊັ່ນ ໝາຍເກາະຂອງສານ, ປະມວນກົດໝາຍແຮງງານ, ການເກັບພາສີຜ່ານອົງການຕົວແທນທີ່ແທ້ຈິງແລະອື່ນໆ. ດ້ວຍການສຶກສາຕາມແບບຂົງຈື ການສ້ໍລາດບັງຫລວງ, ການຄວບຄຸມທາງການເມືອງແບບເດັດຂາດຕາມອຳເພີໃຈ ມັນຈຶ່ງບໍ່ເປັນທັງສັງຄົມ ທີ່ຮັກສາວັດທະນະທຳອັນຫລ້າຫລັງໄວ້ຢ່າງສົມບູນ ແລະກໍບໍ່ເປັນສັງຄົມທັນສະໄໝອັນເສລີ ພາຍໃຕ້ກົດໝາຍລັດຖະທຳມະນູນ ແຕ່ຫາກເປັນດັ່ງເຮືອນຫລັງເຊ້ວ ຊົ້ງ ຕັ້ງຢູ່ເຄິ່ງກາງທາງ ແຫ່ງອາລະຍະທຳສອງແບບ.

ບິດາອີກຄົນນຶ່ງ ຂອງລັດທິຊາດນິຍົມຫວຽດນາມ ຕອນທຳອິດຊື່ ຜັນ ຈາວ ຕຣິນຫ໌ (Phanh Chau Trinh) ເປັນບຸກຄົນນຶ່ງ ທີ່ຈິງໃຈເປີດເຜີຍ ປົກປ້ອງຍ້ອງຍໍລັດຖະທຳມະນູນສະບັບທີ່ຂຽນ ແບບຕາເວັນຕົກ ແລະການເລືອກຕັ້ງປະທານາທິບໍດີແບບສາທາລະນະລັດ ເຊິ່ງໂດຍຕຳແໜ່ງແລ້ວ ເຂົາສາມາດຖືກຟ້ອງຮ້ອງໄດ້. ພາຍຫລັງທີ່ເປັນຜູ້ຫ້າວຫັນໃນນາມຜູ້ອຸປະຖຳຄົນນຶ່ງຂອງຂະບວນການຕໍ່ຕ້ານອັນໂດ່ງດັງ ກຽວກັບການເກັບພາສີໃນຫວຽດນາມພາກກາງ ເມື່ອປີ1908 ແລ້ວ, ຕຣິນຫ໌ ກໍໄປໃຊ້ຊີວິດ ຢູ່ໃນປະເທດ ຝຣັ່ງ ລະຫວ່າງປີ 1911-1925 ບາງຄັ້ງ ກໍໄປຢູ່ໃນຄຸກ. ເຂົາມີຊື່ສຽງໂດ່ງດັງ ຂຶ້ນເປັນພິເສດ ໃນຊຸມປີ 1920 ທັງໃນປະເທດຝຣັ່ງ ແລະ ຫວຽດນາມ ຍ້ອນການໂຈມຕີແນວຄຶດຫລັກໂດຍທົ່ວໄປ ກຽວກັບລະບອບລາຊາທິປະໄຕ (ຈັກກະພັດແມ່ນ ບຸລຸດຜູ້ຍຶດເອົາສິດຂອງຜູ້ອື່ນມາເປັນຂອງຕົນ, ແມ່ນຜູ້ທີ່ຍຶດເອົາອຳນາດ ຂອງປະຊາຊົນມາເປັນຂອງຕົນ) ແລະໂດຍສະເພາະ ໂຈມຕີພະເຈົ້າຈັກກະພັດ ໄຄດິນຫ໌ (Khai-dinh) ທີ່ຄອງບັນລັງແຕ່ປີ 1916-1925. ເມື່ອ ຕຣິນຫ໌ ເສຽຊີວິດ ໃນລະດູບານໃໝ່ ປີ 1926 ພິທີສົ່ງສະການຂອງເຂົາ ຢູ່ນະຄອນໄຊງ່ອນ ໄດ້ກາຍເປັນການສະແດງກຳລັງຂອງມວນຊົນ ແບບບໍ່ເຄີຍມີມາກ່ອນ, ພ້ອມກັນນັ້ນ ນັກສຶກສາຫວຽດນາມກໍໄດ້ນັດຢຸດຮຽນທົ່ວປະເທດ ເພື່ອເຂົ້າຮ່ວມຊຸມນຸມລະນຶກ ເຖິງທ່ານຜູ້ນີ້ຮ່ວມກັນ. ບັດນີ້ ຂັ້ນຕອນໃໝ່ແຫ່ງລັດທິຊາດນິຍົມ ຕົກຢູ່ໃນກຳມືແລ້ວໂດຍດຶງເອົາມະຫາຊົນເຂົ້າຮ່ວມໄດ້ຫລາຍກວ່າໃນຍຸກ ຂອງ ຜັນ ໂບຍ ເຈົ້າ - ຜັນ ເຈົ້າ ຕຣິນ ຫ໌ ຊ້ຳອີກ.

ກ່ອນປີ 1926 ລັດທິຊາດນິຍົມຂອງຫວຽດນາມ ໄດ້ປະເຊີນໜ້າກັບຂອດຈຳກັດສຳຄັນສອງຢ່າງ. ອັນທີນຶ່ງ, ຄວາມເລິກລັບແຫ່ງສາທາລະນະປະໂຫຍດແບບຂົງຈື້ ທີ່ເຫລືອລອດມາ, ຄວາມປາດຖະໜາ ຂອງຊາວຫວຽດນາມຜູ້ອ່ານອອກຂຽນໄດ້ ບໍ່ແມ່ນການລຸກຮື ແຕ່ແມ່ນເພື່ອບັນລຸຖານະຕຳແໜ່ງໃນ ລັດຖະ ບານ ເຊິ່ງອັນນີ້ເຂົ້າກັບຈຸດປະສົງຂອງຝຣັ່ງເປັນຢ່າງດີ. ນັກຊາດນິຍົມທັງຫລາຍ ຕ້ອງພິສູດ ຕົນເອງວ່າ ລັດທິອານານິຄົມກຳລັງໃຊ້ຄົນຫວຽດນາມຜູ້ມີການສຶກສາ ຕາມຄຳສັບຂອງ ຜັນ ໂບຍ ເຈົ໋າ ທີ່ວ່າ" ຂວດ ແກ້ວສຳລັບໃສ່ເຫລົ້າແວງຝຣັ່ງ, ຂໍ້ທ້ອຍເຄື່ອງນຸ່ງສຳລັບເຄື່ອງນຸ່ງຝຣັ່ງ, ຫຸ່ນສຳລັບນັ່ງ ເອ້ລິດຝຣັ່ງ ແລະ ດຳລົງຊີວິດໃນເຮືອນຕຶກຝຣັ່ງ"ແລະ ພິສູດວ່າ ການເຂົ້າເຮັດວຽກເປັນຂ້າລາຊະການພົນລະເຮືອນ ບໍ່ແມ່ນ ວິຖີທາງສ້າງຄວາມກ້າວໜ້າທາງສັງຄົມທີ່ຖືກຕ້ອງຕາມກົດໝາຍ ດັ່ງທີ່ເປັນໃນອະດີດ ແຕ່ຫາກເປັນຮູບ ແບບນຶ່ງແຫ່ງການຍອມຈຳນົນເປັນຂ້ອຍຂ້າຂອງ ອຳນາດອານານິຄົມຕ່າງດ້າວ. ການຂາດໂອກາດປະ ກອບອາຊີບຫລາຍແນວສຳລັບຊາວໜຸ່ມ ຫວຽດນາມ ນອກເໜືອຈາກການເປັນຂ້າລາຊະການພົນລະ ເຮືອນ ແລະຄວາມລົ້ມແຫລວຂອງອຸດສາຫະກຳກັບການຄ້າ ເພື່ອໃຫ້ມັນ ຂະຫຍາຍອອກຢ່າງກວ້າງຂວາງ ພາຍໃຕ້ການຄວບຄຸມຂອງຊາວບ້ານນັ້ນ ໄດ້ຫລຸດຜ່ອນພາລະກິດ ຂອງພວກເຂົ້າໄປນຳ.

ອັນທີສອງ ການລົງຄ້ອຍຂອງລະບອບລາຊາທິປະໄຕ ໃນຖານະສັນຍະລັກແຫ່ງຄວາມເປັນ ເອກະ ພາບຂອງສັງຄົມຫວຽດນາມ, ການແບ່ງແຍກການປົກຄອງຫວຽດນາມອອກເປັນສາມເຂດ ແລະ ຫົກສິບ ແຂວງ ບວກໃສ່ປະສິດທິພາບຂອງການເຮັດວຽກຂອງຕຳຫລວດລັບ ຝຣັ່ງ ໂຮມກັນເຂົ້າ ເຮັດໃຫ້ເປັນເລື່ອງ ຫຍຸ້ງຍາກ ສຳລັບນັກການເມືອງຫວຽດນາມທີ່ຈະສ້າງຕັ້ງສະມາຄົມຫລືຂະບວນການໃດນຶ່ງໃຫ້ທົ່ວເຖິງທົ່ວ ປະເທດ. ມັນເປັນສັນຍະລັກຂອງເຫດການ ເຊິ່ງໃນນັ້ນ ການລະດົມມວນຊົນຜູ້ຮັກຊາດ ເບິ່ງຄືເປັນໄປໄດ້ຍາກ ຈົນຄຳສັບ "ສັງຄົມນິຍົມ" (chu nghia xa hoi) ກາຍເປັນຄຳທີ່ໂດ່ງດັງ ຫລາຍ ໃນບັນດານັກຊາດນິຍົມທັງ ຫລາຍ ເມື່ອຊຸມປີ 1920 ແທນທີ່ຈະສະເໜີແນະນະໂຍບາຍ ທີ່ຈະແຈ້ງ ເຊັ່ນ ການຄວບຄຸມວິສາຫະກິດ ທາງເສດຖະກິດຂອງລັດ ຫລື ການຍຶດເອົາທີ່ດິນຂອງພວກເຈົ້າທີ່ດິນ, ສຳລັບພວກເຂົ໋າ ຄຳວ່າ ສັງຄົມ ນິຍົມນັ້ນ ເປັນພຽງຕົວແທນຂອງການໂຮມກັນ ຄື ອຸດົມການ ແຫ່ງການເຮັດກິດຈະກຳຮ່ວມກັນ. ຜັນ ເຈົ໋າ ຕຣິນຫ໌ ກ່າວໄວ້ໃນປີ 1925 ວ່າ:

*" ໃນເອີຣົບ ລັດທິສັງຄົມນິຍົມ ກຳລັງໄດ້ຮັບຄວາມນິຍົມຫລາຍ ແລະ ໄດ້ພັດທະນາໄປໄກຫລາຍ ຂະນະທີ່ຄົນຢູ່ພີ້ ພາກັນເສີຍມັ່ງບໍ່ສົນໃຈກັບມັນ ພໍປາບຄົນນອນຫລັບ ບໍ່ຮູ້ຂີ້ໝູຂີ້ໝາຫຍັງ... ຖ້າທ່ານ ເຂົ້າໃຈວ່າ ຕ້ອງດຳລົງຊີວິດຢູ່ແບບໃດແລ້ວ ທ່ານກໍຕ້ອງປົກປ້ອງກັນແລະກັນ ເລື່ອງແບບນີ້ ໃນສະໄໝ ກ່ອນ ພໍ່ເຖົ້າທວດຂອງພວກເຮົາກໍຍັງເຂົ້າໃຈແລ້ວ. ຍ້ອນມີເລື່ອງແບບນີ້ແລ້ວ ຈຶ່ງເກີດມີ ສຸພາສິດທີ່ວ່າ ບໍ່ມີໃຜຫັກມັດໄມ້ຖູ່ໄດ້ " ແລະ " ຫລາຍໄມ້ຫລາຍມື ຈຶ່ງເຮັດວຽກໄດ້ຜົນໃຫຍ່ "*

ເຂົ໋າໃຫ້ຂໍ້ສັງເຫດວ່າ ໃນຍຸກເກົ່າ *"ຊາວຫວຽດນາມຮູ້ຈັກການເຮັດວຽກເປັນໝູ່ຄະນະ ແລະ... ສະຖານະການຂອງພວກເຂົ໋າ ກໍບໍ່ຄືກັບສະຖານະການອັນໜ້າສົມເພດໃນປັດຈຸບັນ ເຊິ່ງຜູ້ຄົນປະຖິ້ມກັນ ແລະກັນ... ໃນບ້ານນຶ່ງໆ ດຽວນີ້ອາດຈະມີຄົນຢູ່ເປັນຮ້ອຍ ແຕ່ການພົວພັນຂອງຜູ້ຄົນໃນບ້ານຟາກນີ້ກັບ ຜູ້ຄົນໃນອີກຟາກນັ້ນຂອງບ້ານ ລ້ວນແຕ່ຫັນໄປໃຫ້ຄວາມສຳຄັນ ແກ່ອຳນາດ"* ເຂົ໋າຈຶ່ງ ສະຫລຸບວ່າ *"ມື້ນຶ່ງ ຖ້າພວກເຮົາຕ້ອງການໃຫ້ຊາດຫວຽດນາມ ມີທັງເສລີພາບ ແລະເອກະລາດແລ້ວ ກ່ອນອື່ນໝົດ ຊາວ ຫວຽດນາມ ຕ້ອງມີຈິດວິນຍານ ແລະພຶດຕິກຳແບບຊຸມຊົນ (ເປັນອັນນຶ່ງອັນດຽວກັນ). ແຕ່ຖ້າພວກເຮົາ ຕ້ອງການມີຈິດວິນຍານ ແລະພຶດຕິກຳແບບຊຸມຊົນ (ເປັນອັນນຶ່ງອັນດຽວກັນ) ຈະມີຫຍັງ ດີໄປກວ່າການ ເຫດສະໜາເລື່ອງລັດທິສັງຄົມນິຍົມ ໃຫ້ຊາວຫວຽດນາມຟັງບໍ່ ?"*

ມາຮອດທ້າຍໆ ຊຸມປີ 1920 ແລະຕົ້ນຊຸມປີ 1930 ລັດທິຄອບຄົວນິຍົມ (familism) ແບບຂົງຈື້ ຄ່ອຍໆສະຫລາຍໄປ ແລະຄວາມເປັນຕົວບຸກຄົນ ກໍເລີ່ມຫລຸດຜ່ອນລັກສະນະຂຶ້ນກັບຜູ້ອາວຸໂສກວ່າ ກັບຍາດ ພີ່ນ້ອງລົງແດ. ຂະນະທີ່ການປ່ຽນແປງແບບນີ້ ໄດ້ເຮັດໃຫ້ຄວາມຜູກພັນແຫ່ງສາຍສຳພັນ ທາງສັງຄົມທະວີ ແຮງຂຶ້ນເປັນການຊົ່ວຄາວນັ້ນ ຕຣິນຫ໌ ໄດ້ກ່າວປະນາມມັນ ແລະ ມັນກໍໄດ້ຫລຸດຜ່ອນຄວາມ ດຶງດູດ

ຂອງອາຊີບຂ້າລາຊະການພົນລະເຮືອນ ໃນຖານະວ່າເປັນວິຖີທາງນຶ່ງທີ່ຕອບສະໜອງຄວາມໃຝ່ຝັນຕາມ ປະເພນີນິຍົມຂອງຄອບຄົວ (ຫລາຍກ່ອນຂອງບຸກຄົນ) ຢູ່ໃນນະວະນິຍາຍອັນຍັດແຍ່ງໃນຕົວເລື່ອງນຶ່ງ ຊື່ *"ຄວາມເຂັ້ມງວດແຫ່ງພັນທະ"* (Doan tuyet/A Severance of Ties) ຍັດ ລິນຫ໌ ນັກປະ ພັນ ຜູ້ໂດ່ງດັງ ແລະ ຜູ້ກໍ່ຕັ້ງກຸ່ມນັກປະພັນເພິ່ງຕົນເອງກຸ້ມຕົນເອງ ທີ່ມີອິດທິພົນ (ຕູ ລຸກ ວັນ ດວນ Tu luc van doan) ໄດ້ໂຈມຕີຄວາມບໍ່ເອົາຫົວໃສ່ໃຈຊາທີ່ເກີດຂຶ້ນກັບສະມາຊິກຄົນອື່ນໆ ໃນຄອບຄົວ ດ້ວຍການໃຊ້ອຳນາດເດັດ ຂາດຂອງຫົວໜ້າຄອບຄົວ ແລະເຕືອນວ່າ ຫວຽດນາມ ກຳລັງຕົກເປັນ ປະເທດຫລ້າຫລັງກວ່າໝູ ໃນບັນ ດາປະເທດຕາເວັນອອກໄກທັງໝົດ ຄື ຍີ່ປຸ່ນ ຈີນ ແລະ ສະຫຍາມ, ຂະໜາດຂອງຄອບຄົວໃນເວລານີ້ ມັນບໍ່ໄດ້ເປັນຄືດັ່ງທີ່ເປັນໃນອະດີດອີກແລ້ວ".

ໃນປີ 1927 ກົວ ມິນ ຕັງ ພັກຈີນຄະນະຊາດ (Nationalist Party/ Kuomintang) ຂຶ້ນກຳອຳນາດ ໃນຈີນ ເປັນຜົນຮັບສືບເນື່ອງມາຈາກການສົ່ງທະຫານກວາດລ້າງພາກເໜືອຂອງ ຈຽງ ໄຄເຊັກ (Chiang Kai-shek). ໃນທີ່ສຸດ ການປະຕິວັດຈີນ ຄືວ່າໄດ້ສະໜອງອຸດົມການທາງ ການເມືອງແກ່ຫວຽດນາມ ດ້ວຍ ແບບຢ່າງອັນເດັດດຽວສຸດກົກສຸດປາຍ ຂອງພັກປະຕິວັດ ທີ່ເໝາະສົມກັບຕາເວັນອອກ ແລະ ອາຊີຕາເວັນ ຕົກສຽງໃຕ້. ເດືອນທັນວາປີ 1927 ພັກຊາດນິຍົມ ວຽດນາມ ຮູ້ຈັກກັນໃນ ນາມ ກວັກ ດັນດັງ (Quoc dan dang)ໃນພາສາຫວຽດນາມ ທຽບເທົ່າກັບ ກົວ ມິນ ຕັງ (kuo-min-tang)ໃນພາສາຈີນ, ແລະຕໍ່ມາເອີ້ນວ່າ ວີ ເອັນ ຄວີ ດີ ດີ(VNQDD) ຕັ້ງຂຶ້ນແບບໃຕ້ດິນ ໃນ ຮາໂນຍ. ພັກນີ້ເຕີບໃຫຍ່ຂຶ້ນຈາກສະໂມສອນປຶ້ມອ່ານ ໃນຮາໂນຍ ເຊິ່ງຈຸດປະສົງແມ່ນການຂຽນ ແລະແປ ເໜືອສິ່ງອື່ນໃດ ແມ່ນຈັດພິມປຶ້ມທີ່ໃຫ້ຜູ້ອ່ານຊື້ຫາໄດ້ໃນ ລາຄາ ຖືກໆ ແລະແຜ່ຫລາຍກວ້າງຂວາງ. ເຊັ່ນ ໃນປີ 1927 VNQDD ມີສະມາຄົມລັບ ໂດຍໝຸນໃຊ້ ປະເພນີດັ້ງເດີມ ຄືເປັນອ້າຍນ້ອງຮ່ວມສາບານກັນ (ມີດປາດດື່ມເລືອດ) ຢູ່ຕໍ່ໜ້າຮ້ານບູຊາ ເພື່ອຮັດແໜ້ນ ຄວາມສຳພັນຂອງສະມາຊິກ. ການຮັບເອົາ ສະມາຊິກພັກໃໝ່ ຕ້ອງໃຫ້ສະມາຊິກເກົ່າສອງຄົນ ນຳສະເໜີ ເຂົ້າມາ ແລະເປັນຜູ້ຮັບປະກັນເອົາ, ສະມາຊິກຜູ້ກໍ່ຕັ້ງທີ່ແກ່ອຸດົມການ ແຕ່ຫາກຂາດ ປະສົບການ ຫລາຍ ຄົນ ເປັນນັກສຶກສາຈາກໂຮງຮຽນ ການຄ້າຊັ້ນສູງໃນເຂດຮາໂນຍ ເຊັ່ນກະໂຕປະທານເອງຄື ຫງຽນ ທາຍ ຮອກ (Nguyen Thai Hoc. 1907-1930). ລັກສະນະຂອງພັກ VNQDD ນັບແຕ່ລະຍະ ທຳອິດມາ ເບິ່ງຄືວ່າ ແມ່ນຄວາມຢຸດສະງັກແຫ່ງສັນຍະລັກທາງການເມືອງ ທີ່ຍືບຍືມມາ. ເຖິງແມ່ນວ່າພັກໄດ້ປຶກສາ ຫາລື ກັບກຸ່ມປະຕິວັດອື່ນໆ ໃນນັ້ນ ໂຮມທັງພວກຄອມມູຍນິດ ຮຸ່ນທຳອິດ ເພື່ອພະຍາຍາມຕໍ້າໂຮມ ຂະບວນຊາດນິຍົມຫວຽດນາມ ຕົກລົງກັນບໍ່ໄດ້ ຢູ່ໃນສອງບັນຫາສຳຄັນ ຄື 1/ພັກ VNQDD ມັກເນັ້ນຍ້ຳ ວ່າ ກຳມະການສູນກາງພັກ ຄວນຕ້ອງດຳເນີນການຢູ່ພາຍໃນ ຫວຽດນາມອານານິຄົມ, ຂະນະທີ່ພວກ ຄອມມຸຍນິດ ຢູ່ ກວງຕຸ້ງ ຮ່ອງກົງ ແລະ ສະຫຍາມ ມັກໃຫ້ດຳເນີນການຢູ່ ພາຍນອກ ຫລາຍກວ່າ, 2 ການຜ່ອນຜັນໂຍະຍາບ ຂອງພັກ VNQDD ຕໍ່ກຽດສັກສີ ຂອງແບບຢ່າງຈີນ ກໍເປັນການຝັງຫົວແບບ ຕາຍຕົວເກີນໄປ ຈົນເຖິງຂັ້ນ ຢຸດສະງັກ ບໍ່ເຂົ້າຮ່ວມກັບກຸ່ມຊາດນິຍົມອື່ນໆ ຈົນຕ້ອງສະຫລະຊື່ຂອງພັກໄປ.

ໂຄງຮ່າງຂອງພັກ VNQDD ແມ່ນຮູບການມືສອງ ຂອງ ລັດທິສູນກາງນິຍົມປະຊາທິປະໄຕ ແບບເລນິນ(ປຶກສາຫາລືກັນແບບຮອມຫມູ ກຽວກັບນະໂຍບາຍຂອງພັກ ໃນຫລາຍລະດັບປະສົມກັບລະ ບຽບການຈັດແບ່ງຊັ້ນ ທີ່ໃຫ້ຖັນແຖວຕ່ຳສຸດໃນພັກ ຕ້ອງເຊື່ອຟັງຖັນແຖວສູງກວ່າ)ແມ່ນການເອົາແບບ ຢ່າງ ຂອງກະໂຕການຈັດຕັ້ງຂອງ ກົວ ມິນ ຕັງ ເຊິ່ງກໍແມ່ນເງົາສະທ້ອນອັນບໍ່ຄົບຖ້ວນຂອງການຈັດຕັ້ງ ຄອມມູຍນິດ ຣັດເຊຍອີກຕໍ່ນຶ່ງ. ຢູ່ໃນແຜ່ນເຈ້ຍ ມີການຂຽນເຖິງໜ່ວຍພັກທ້ອງຖິ່ນ, ຄະນະກຳມະການ ຂັ້ນແຂວງ, ຄະນະກຳມະການຂັ້ນເຂດ ແລະກຳມະການສູນກາງຂັ້ນສູງສຸດ. ກົດລະບຽບຂອງພັກ ເນັ້ນໜັກ ວ່າ ຄະນະກຳມະການຂອງແຕ່ລະກຸ່ມ ນັບແຕ່ໜ່ວຍພັກຂັ້ນທ້ອງຖິ່ນ ຮອດກຳມະການສູນກາງ ຕ້ອງຖືກ ຮັບລືອກຕັ້ງ ຫລື ເລືອກຊ້ຳຄືນໃນທຸກໆຫົກເດືອນ- ນັ້ນແມ່ນຂໍ້ຮຽກຮ້ອງແບບຝັນລອຍລົມ ທາງດ້ານການ ຈັດຕັ້ງຂອງພັກປະຕິວັດໃຕ້ດິນ ນອກກົດໝາຍພັກນຶ່ງ ທີ່ຢູ່ພາຍໃຕ້ການຕິດຕາມກວດກາ ຂອງຕຳຫລວດ. ບໍ່ຄືກັບພັກຄອມມູຍນິດຈີນ ພັກ VNQDD ຍັງຂາດການຊຸກຍູ້ຂອງຊົນຊັ້ນພໍ່ຄ້າຈຳນວນໃຫຍ່ໃນເມືອງທ່າ,

ຂອງກຸ່ມນາຍທະນາຄານຜູ້ສາມາດສົມທົບລັດທິຊາດນິຍົມ ເຂົ້າກັບເປົ້າຫມາຍທາງການເມືອງ ໂດຍສະ ເພາະ ອັນທີ່ບໍ່ເປັນແບບຄອມມູຍນິດ ໃນພາກປະຕິບັດ. ບາງທີອາດເປັນ ຍ້ອນເຫດຜົນນີ້ເອງ ທີ່ພັກ VNQDD ຂາດພາບວາດສະເພາະ ທີ່ສັງຄົມຫວຽດນາມ ໃນອະນາຄົດຈະເປັນໄປ ພາຍຫລັງການໂຄ່ນລົ້ມ ລັດທິອານານິຄົມ. ຢູ່ໃນແຜນງານປະຕິວັດສາມຂັ້ນຂອງພັກ ເມື່ອທ້າຍຊຸມປີ 1920 ນັ້ນ, ຂັ້ນທີນຶ່ງ ແມ່ນ "ຍຸກຈໍ່ໄຂ່" ເມື່ອສະມາຊິກໃຫມ່ ຖືກລະດົມເຂົ້າມາ, ຂັ້ນທີສອງເອີ້ນວ່າ "ຍຸກກະກຽມວາງແຜນຍຸດທະສາດ" ແລະຂັ້ນທີສາມ ອັນເປັນຂັ້ນສຸດທ້າຍ ເອີ້ນວ່າ "ຍຸກມ້າງມຸ່ນ" ລະບອບອານານິຄົມ. ກະໂຕແນວຄຶດ ຂອງ ການປະຕິວັດແບບຮຸນແຮງນັ້ນເອງໄດ້ກາຍມາ ເປັນຈຸດອະວະສານຂອງມັນເອງ. ຫນັງສືພິມຂອງພັກມີຊື່ ເອີ້ນວ່າ " ວິນຍານ ແຫ່ງການປະຕິວັດ" (ຮົງກັ ມັງ, The Soul of Revolution/Hon cach mang) ແລະ ຄະນະອະນຸກຳມະການ ທັງຫມົດຂອງຄະນະພັກ ຖືກມອບຫມາຍວຽກຄື "ການຄາຕະກຳ", ລອບສັງ ຫານເຈົ້າຫນ້າທີ ຜູ້ສຳຄັນ ຂອງຝ່າຍອານານິຄົມ. ວິນຍານ ຂອງ ບລັງກີ ຂຶ້ນປົກຄອງພ້ອມໆວິນຍານ ຂອງຊຸນຍັດເຊັນ ແລ້ວ.

ມາເຖິງຊຸມປີ 1920 ແລະ ຊຸມປີ1930 ປະຕິກິລິຍາ ຂອງຫວຽດນາມຕໍ່ລັດທິອານານິຄົມຝຣັ່ງ ສະແດງຕົວອອກເປັນສອງຮູບການກົງກັນຂ້າມ ຄືຈາກພັກການເມືອງພາກເຫນືອ ແລະຂະບວນ ການຝ່າຍ ສາສະຫນາຂອງພາກໃຕ້. ກຽວກັບຂະບວນການທາງສາສະຫນານັ້ນ, ສາສະຫນາ ກາວດ່າຍ (Cao Dai) ເຊິ່ງອ້າງວ່າໄດ້ຊັກຈູງຄົນມາເຂົ້າຮີດໄດ້ຮອດມື້ລະພັນຄົນໃນປີ 1926-1927 ແລະເຫດສະຫນາສັ່ງສອນຫລັກ ສິນທຳ ຂອງລັດທິຈິດວິນຍານ, ທັງເຄັ່ງຄັດຕາມແບບ ການນັບຖືຂົງຈື້ ແລະກິນແບບມັງສະລິວັດ(ພືດຜັກ), ໄດ້ເປີດເຜີຍເຖິງຄວາມລຳອຽງຕໍ່ຕ້ານອານານິຄົມ ຂອງຝ່າຍຫົວຮີດເດີມປະເພດນຶ່ງ (ຄຳວ່າ ກາວດ່າຍ ແປວ່າ " ເວທີສູງ "ຄືເປັນເວທີສູງຫລາຍຈົນບໍ່ມີ ຫລັງຄາມຸງ, ຢູ່ເຫນືອມັນຂຶ້ນໄປກໍມີ ພະເປັນເຈົ້າ ຜູ້ຍິ່ງ ໃຫຍ່ ເຊິ່ງບໍ່ອາດຂະຫນານນາມພະອົງໄດ້ ແລະສະແດງຕົວໃຫ້ໂລກລຸ່ມຮັບຮູ້ໄດ້ ກໍແຕ່ດ້ວຍການເຂົ້າສິງ ນາງທຽມ ເທົ່ານັ້ນ). ບໍ່ດົນ ພວກຫົວຫນ້າຂອງກາວດ່າຍຫລາຍຄົນ ກໍກາຍເປັນນັກຊາດນິຍົມລາຊາ ທິປະໄຕ ຄື ຢາກຮ່ວມມື ແບບຢູ່ໄກໆ ກັບກອງທັບຍີ່ປຸ່ນ. ເມື່ອ ກອງທັບມາເຖິງ ໃນຕົ້ນຊຸມປີ 1940. ຂະບວນ ການທາງສາສະຫນາ ຈາກພາກໃຕ້ ອີກຂະບວນນຶ່ງ ຄື ພຸທສາສະຫນາ ນິກາຍ ຮວາ ຮາວ (Hoa Hao) ເຊິ່ງຕັ້ງຂຶ້ນໃນປີ 1939 ແລະມຸ່ງຫມັ້ນໃສ່ການລຶບລ້າງລັດທິບູຊາພະຮູບ ແລະພິທີກຳແພງໆໃນວັດ ຢູ່ ຫວຽດນາມ, ນິກາຍນີ້ ຜູ້ກໍ່ຕັ້ງ ເປັນຫມໍເຢົາຜູ້ສັດທາສູງ ຄົນນຶ່ງ (ຫູຢິນ ຜູ ໂຊ / Huynh Phu So 1919 - 1947) ທີ່ຈົ່ງຜົມຍາວຄືໃບ ສະໄຫມສະຕະວັດທີສິບເກົ້າ ເພື່ອສະແດງວ່າເຂົາບໍ່ໄດ້ຕົກຢູ່ກ້ອງອິດທິພົນ ຂອງ ຕາເວັນຕົກ. ຍ້ອນວ່າພວກຫົວຫນ້າພັກການເມືອງທັງຫລາຍ ມັກຈະຍຶ້ນກັບທິດສະດີການເມືອງຂອງ ຕາເວັນຕົກ ຫລາຍກວ່າຄວາມລີ້ລັບ ແຫ່ງວັດທະນະທຳຂອງອະດີດ ເພື່ອສູ້ຢັນກັບລັດທິຈັກກະພັດນິຍົມ ຕາເວັນຕົກ, ເຖິງຢ່າງນັ້ນ ຄວາມເປັນໄປໄດ້ຂອງການລະດົມກຳລັງທາງການເມືອງໃນພາກໃຕ້ ກໍຍັງສືບຕໍ່ ດຳເນີນໄປຢູ່. ຕົວຢ່າງ ການຂະຫຍາຍຕົວ ດ້ານການປູກຝັງຢູ່ພາກໃຕ້ ໄດ້ເຮັດໃຫ້ຊົນຊັ້ນຜູ້ອອກແຮງງານ ກະສິກຳ ຕົກເປັນຜູ້ໄຮ້ທີ່ດິນປູກຝັງ ກໍເປັນຜູ້ທ້າວຫັນກວ່າເກົ່າ ແລະຄ່ອຍໆຫັນໄປສະຫນັບສະຫນຸນການ ປະຕິວັດຫລາຍກວ່າ ພວກຊາວນາຜູ້ເປັນເຈົ້າ ທີ່ນາຊ້ຳອີກ. ພວກແຮງງານຮັບຈ້າງຕາມຊົນນະບົດ ເດີນ ທາງລົງມາພາກໃຕ້ ອາດຈະເຮັດວຽກຮັບໃຊ້ນາຍຈ້າງຈຳນວນນຶ່ງ, ບໍ່ເຖິງຂັ້ນຈະເປັນເຈົ້າຂອງກິດຈະ ການ ເສດຖະກິດອັນໃດໄດ້, ກໍມີຄວາມຈົງຮັກພັກດີ ເປັນພິເສດຕໍ່ນາຍຈ້າງຜູ້ນຶ່ງ ຫລືຕໍ່ບ້ານນຶ່ງໆ. ສະພາບ ຊີວິດການເປັນຢູ່ຂອງ ພວກເຂົາອະນາຖາຫລາຍ ເຖິງວ່າພວກເຂົາ ເປັນອິດສະລະຈາກການຄອບງຳ ຂອງ ພວກຂຸນນາງ ບ້ານເກີດ ໃນພາກເຫນືອ.

ພັກຊາດນິຍົມຫວຽດນາມ (VNQDD) ອ່ອນແອຫລາຍ ໃນຫວຽດນາມພາກໃຕ້. ໃນປີ 1928 ມີພັກ ຢູ່ຊາວສອງຫນ່ວຍ ໃນພາກໃຕ້ ປະກອບດ້ວຍສະມາຊິກຖືອາວຸດ 256 ຄົນ. ເຖິງແນວໃດກໍດີ ຕົ້ນປີ 1929 ພັກ ໄດ້ພະຍາຍາມສ້າງພັນທະມິດ ກັບກຳມະກອນຊາວນາຢູ່ທີ່ນີ້, ສະມາຊິກພັກຢູ່ຮາໂນຍ ໄດ້ຊ້າ ຊາຍຝຣັ່ງຄົນນຶ່ງ ຊື່ ບາແຊງ ຜູ້ເປັນຫົວຫນ້າລະດົມແຮງງານໃນທົ່ວພາກພື້ນອິນດູຈີນ ໃຫ້ມາເຮັດການ

ປູກຝັງຢູ່ພາກໃຕ້ ການຕອບໂຕ້ຂອງຝຣັ່ງ ແມ່ນການປົກຄອງອັນໂຫດຫ້ຽມ ມີການຈັບກຸມ ແລະກວາດລ້າງ ຫລື ທໍລະມານ ສະມາຊິກພັກ ທັງ 225 ຄົນ ແລະທຳລາຍຫນ່ວຍພັກ ເກືອບທັງຫມົດ. ທ່ານ ຣອກ ຫົວ ຫນ້າພັກ VNQDD ຫນີເອົາໂຕລອດ ແຕ່ຕັດສິນໃຈດຳເນີນການຕໍ່ສູ້ ດ້ວຍອາວຸດທັນທີ ເຖິງຈະສ່ຽງຢ່າງ ໄຮ້ຫວັງ, ເພື່ອບໍ່ໃຫ້ສູນເສຽແຫລ່ງຊຸບພະຍາກອນ ທີ່ເຂົາຍັງຜ່ຄວບຄຸມໄວ້ຢູ່ ໃນເດືອນກຸມພາ ປີ 1930 ພັກ VNQDD ຍຶດເມືອງເຢັນບ່າຍ ຢູ່ພາກເຫນືອໄດ້ຢ່າງກະທັນຫັນ ໂດຍຈັດການ ໃຫ້ກອງທະຫານຫວຽດ ນາມ ລຸກຮືຂຶ້ນຕໍ່ຕ້ານ. ໃນການປາບປາມຕໍ່ມາ ຝຣັ່ງຈັບພວກຂັ້ນນຳຂອງພັກ ແລະຕັດຄໍພວກເຂົາ ໃນນັ້ນ ຮວມທັງ ທຽນ ໄທ ຣອກ. ເປັນໄປໄດ້ວ່າ ເຫດການນີ້ແມ່ນຈຸດຫັກປ່ຽນ ແຫ່ງປະຫວັດສາດຫວຽດນາມ ຍ້ອນວ່າການກວາດລ້າງນັກປະຕິວັດ ທີ່ບໍ່ແມ່ນນັກຄອມມຸຍນິດຈຳນວນຫລາຍນັ້ນ ໄດ້ເຮັດໃຫ້ນັກຄອມມຸຍ ນິດ ຢູ່ໃນຖານະໄດ້ປຽບ ເພື່ອເຕົ້າໂຮມຄືນກອງກຳລັງຊາດນິຍົມຫວຽດນາມ ພາຍໃຕ້ຄັນທຸງຂອງພວກເຂົາ.

ບຸລຸດນຶ່ງ ທີ່ມີນາມຍົດຈະແຈ້ງກວ່າຫມູ່ຫມົດ ເພື່ອຍົກຄັນທຸງນີ້ ໄດ້ຮ່ຳຮຽນທິດສະດີ ມາກຊິສ ມາຈາກປະເທດຝຣັ່ງ ໃນລະຫວ່າງສົງຄາມໂລກຄັ້ງທີ 1. ເຂົາເກີດ ປີ 1890 ທີ່ບ້ານ ເຫງ້ອັນ ເຊິ່ງເປັນ ອູ່ນອນຂອງກຸ່ມ "ຂ່ອຍເຈົ້າຊີວິດ" ແລະເປັນຝ່າຍຕໍ່ຕ້ານຝຣັ່ງ ຢ່າງສະຫລາດສະຫລຽວຕະຫລອດມາ, ໂຮຈິມິນ ໃຊ້ນາມແຝງຂອງເຂົາ ເປັນທີ່ຮູ້ຈັກກັນດີ ຕາມສະໄຫມນິຍົມ ນັບແຕ່ຊຸມປີ 1940 ເປັນຕົ້ນມາ) ໄດ້ເດີນທາງໄປເອີຣົບ ໃນຖານະເດັກຊາຍຂີ້ທຸກຄົນນຶ່ງ ນຳເຮືອໂດຍສານຝຣັ່ງ. ເມື່ອໄດ້ອ່ານບົດ ນິພົນຂອງ ເລນິນຄັ້ງທຳອິດ ຢູ່ໃນຫນ້າຫນັງສືພິມຊື່ "ມະນຸດຊາດ (L'Humanite') ຂອງພັກຄອມມຸຍນິດຝຣັ່ງ ເຂົາກໍ ປ່ຽນໃຈ ເດີນທາງໄປ ມອສໂຄວ ແທນ ໃນປີ 1923 ແລະ ຕ່ຈາກນັ້ນ ກໍໄປ ກວາງຕຸ້ງ ໃນປີ 1925 ເພື່ອຮັບ ເປັນຕົວແທນໃຫ້ ກົກມິນຕັ້ງ (Comintern) ໃນຈີນພາກໃຕ້. ທີ່ກວາງຕຸ້ງ ເຂົາໄດ້ ກ່ໍຕັ້ງອົງການນຶ່ງ ຮູ້ຈັກ ກັນໃນນາມ ສະໂມສອນຊາວຫນຸ່ມປະຕິວັດຫວຽດນາມ ຫນັງສືພິມຂອງ ສະໂມສອນຊື່ ຖັນຫ໌ ຍຽນ (Thang Nien/Youth) ໄດ້ຈັດພິມຄຳສັບແປ ລັດທິມາກຊິສ ເປັນພາສາຫວຽດນາມ ແລະ ສະມາຊິກ ຂອງສະໂມ ສອນບາງຄົນທີ່ຖອນໂຕມາຈາກກຸ່ມຜູ້ລີ້ໄພ ວຽດນາມ ກໍໄດ້ສະຫມັກເຂົ້າຮຽນ ໃນສະຖາບັນການທະຫານ ວາມປົວ ຂອງຈີນ ແລ້ວໃນປີ 1930 ຂະນະທີ່ຢູ່ຮອງກົງ ທ່ານ ໂຮ ໄດ້ຊັກຊວນຜູ້ນຳຂອງພັກການເມືອງ ນິຍົມຄອມມຸຍນິດວຽດນາມອື່ນໆ ເຂົ້າຮ່ວມກັບເຂົາ ກ່ໍຕັ້ງພັກຄອມມຸຍນິດອິນໂດຈີນ ຈາກນັ້ນ ຈົນຮອດຕົ້ນປີ 1940ເຂົາໄດ້ແຕ່ທຽວເຂົ້າທຽວອອກຄຸກຢູ່ເລີ້ງໆ, ໂຮຈິມິນ ໃຊ້ເວລາລີ້ໄພການເມືອງຢູ່ ມອສ ໂຄວ ຫລື ຈັດ ຕັ້ງນັກປະຕິວັດຫວຽດນາມ ໃນຂົງເຂດຕ່າງໆ ເຊັ່ນ ພາກໃຕ້ຂອງຈີນ ແລະພາກຕາເວັນອອກສຽງເຫນືອ ຂອງສະຫຍາມ. ຄວນຮັບຮູ້ວ່າ ໃນລະຍະຕົ້ນໆ ວຽກງານຂອງເຂົາ ບໍ່ແມ່ນພຽງແຕ່ເປັນສ່ວນປະກອບນຶ່ງ ຕໍ່ການວິວັດຂອງລັດທິຊາດນິຍົມຫວຽດນາມ ແຕ່ຍັງມີສ່ວນໃນການວາງແຜນລະດັບສາກົນ ທີ່ຈະຫວ່ານ ແນວພັນລັດທິຄອມມຸຍນິດ ອອກທົ່ວອາຊີອາຄະເນ ນັບແຕ່ໃນຫມູ່ຊາວມາເລ ຂຶ້ນມາຮອດ ຊາວຫວຽດນາມ.

ເບິ່ງໃນບາງດ້ານ ໂຮຈິມິນ ແຕກຕ່າງຢ່າງເຫັນໄດ້ຄັກກັບ ມາວເຊຕຸ້ງ ຜູ້ນຳຈີນ ທີ່ເຮັດວຽກແນວ ດຽວກັນ. ຂະນະທີ່ການປະຕິວັດຄອມມຸຍນິດຈີນ ມີການເອີ້ນເອົາການນຳຫລັກແຫລ່ງຂັ້ນແຂວງ ຈາກແຜ່ນ ດິນໃຫຍ່ຂອງຈີນ ທີ່ຊົນຊັ້ນຊາວນາ ບໍ່ຖືກໃຈ ແລະຍາມໃດເປັນປໍລະປັກກັບທຸກຮູບ ແບບທີ່ມີລັກສະນະ ປັນຍາຊົນ ຂອງສົນທິສັນຍາທ່າເຮືອ, ຝ່າຍຫວຽດນາມ ຊ້ຳເປັນເຈົ້າການ ດຳເນີນການຊີ້ນຳ ຢູ່ອ້ອມໆເຂດ ນອກ ປະສານສົມທົບພາກພື້ນພູມສາດ ລົງມືກະຈາຍການຕໍ່ຕ້ານອານານິຄົມອອກກວ້າງຂວາງ. ແຕ່ວ່າ ໂຮຈິມິນ ກໍແມ່ນ ນັກຄອມມຸຍນິດ ດ້ວຍເຫດຜົນ ແຫ່ງຄວາມຮັກຊາດອັນດຽວກັນກັບ ມາວເຊຕຸ້ງ. ທິດສະດີ ຄຳສອນຂອງ ເລນິນ ກ່ຽວກັບລັດທິຈັກກະພັດນິຍົມ ໄດ້ສະຫນອງຄຳອະທິບາຍ ທີ່ຫນ້າເຊື່ອຫມັ້ນ ກ່ຽວກັບ ປະພຶດຕິກຳຂອງພວກຝຣັ່ງ ຢູ່ຫວຽດນາມ ແລະ ໃນເວລາດຽວກັນ ກໍສະເຫນີວ່າ ໃນທີ່ສຸດແລ້ວ ລັດທິ ອານານິຄົມກໍຕ້ອງຈົບຫາຍວາຍວອດໄປ. ສ່ວນທິດສະດີ ວ່າດ້ວຍການຈັດຕັ້ງສ້າງກ່ໍ ຜູ້ນຳແບບເລນິນ ກໍໄດ້ ສະຫນອງວິທີວິທະຍາອັນນຶ່ງ ທີ່ສາມາດເຮັດໃຫ້ ແມ່ນແຕ່ຕຳຫລວດລັບກໍສັບສົນໄດ້. ຢ່າງໃດກໍດີ ໃນຊຸມປີ 1930 ນັ້ນ ນັກຄອມມຸຍນິດແບບຮີດເດີມທຸກໆຄົນ ໃນຫວຽດນາມ ກໍຕ້ອງໄດ້ດຳລົງຄົງຢູ່ຄຽງຄູ ຫລື ແຂ່ງ ຂັນກັບພວກທີ່ໄດ້ຊື່ວ່າ ນັກຄອມມຸຍນິດແບບໂຕຣສກິນິຍົມ. ກຸ່ມໂຕຣສກິ ແມ່ນພວກຄູ ສອນ, ນັກສຶກສາ ແລະ

ນັກຫນັງສືພິມຜູ້ເຖິງຖອງ ເຂັ້ມແຂງດີ ໃນພາກໃຕ້ ເຖິງຂັ້ນປະກາດອ້າງວ່າມີ ສາວົກຜູ້ຫ້າວຫັນ ຮອດສາມ ພັນຄົນ ໃນຫວຽດນາມ ເມື່ອປີ 1939. ພວກເຂົ້າໂຈມຕີພັກຄອມມູຍິດອິນໂດຈີນ ວ່າໄປຮັບເອົາການໂອບ ອຸ້ມຄຸ້ມຄອງຈາກພັກຄອມມູຍນິດຝຣັ່ງ ຜູ້ເຊິ່ງໃນສາຍຕາຂອງກຸ່ມນິຍົມໂຕຣສກີ ເຊື່ອຢ່າງໝັ້ນໃຈວ່າ ບໍ່ໄດ້ມີ ຄວາມມຸ່ງມາດປາດຖະຫນາຢ່າງເຕັມປ່ຽມ ຕໍ່ການແຕກສະຫລາຍ ຂອງຈັກກະວັດອານານິຄົມຝຣັ່ງ. ພວກ ນິຍົມໂຕຣສກີ ຍັງໄດ້ປະນາມລັດທິຂອງຊົນຊັ້ນກຳມາຊີບວ່າມີບົດບາດກ້າວເດີນ ຫລາຍຂັ້ນຕອນໂພດ ເຊັ່ນ ຍັງຕ້ອງເປັນພຽງຮ່າງສຳເນົາ ຂອງຄະນະປະຕິວັດເຄິ່ງປະຊາທິປະໄຕ ອັນຈຳກັດ ຂອງນາຍທຶນນ້ອຍ ເພື່ອ ເອກະລາດແຫ່ງຊາດ ມີຊົນຊັ້ນໃນສັງຄົມເຂົ້າຮ່ວມຢ່າງກວ້າງຂວາງ ແທນທີ່ຊົນຊັ້ນກຳມາຊີບອ້ອຍຕ້ອຍ ຜູ້ເປັນດັຊນີ ຕັດສິນຊີ້ຂາດຂອງການປະຕິວັດສັງຄົມນິຍົມ. ໂດຍສວຍເອົາໂອກາດທີ່ ລັດຖະບານປົກຊ້າຍ ໃນປະເທດຝຣັ່ງ ຂຶ້ນກຳອຳນາດໄດ້ໃນຂັ້ນຕໍ່ມາ ອັນໄດ້ເຮັດໃຫ້ການຄວບຄຸມກວດກາ ໃນອານານິຄົມ ຜ່ອນ ເບົາລົງໄດ້ລະຍະສັ້ນໆ ກຸ່ມນິຍົມໂຕຣສກີ ກັບນັກຄອມມູຍນິດສາມັນກໍໄດ້ສູ້ກັນເອງ ຢູ່ໃນການເລືອກຕັ້ງ ສະມາຊິກສະພາເທດສະບານເມືອງ ແລະສະພາອານານິຄົມ ຢູ່ພາກໃຕ້ຫວຽດນາມ ເມື່ອກາງໆ ແລະທ້າຍ ຊຸມປີ 1930. ກຸ່ມນິຍົມ ໂຕຣສກີ ເຊິ່ງປະຕິບັດການຢູ່ໃນຂອບເຂດຕົວເມືອງໄດ້ດີກວ່າ ຢູ່ໃນເຂດຊົນນະບົດ ບ່ອນທີ່ການຕໍ່ສູ້ປະຕິວັດຂອງຫວຽດນາມ ຈະຕ້ອງຖືກໂອນຕໍ່ໃນຊຸມປີ 1940 ມັກເປັນ ຝ່າຍມີໄຊຊະນະ ຢູ່ໃນ ການແຂ່ງຂັນເຫລົ່ານີ້. ລາລູຕ ເຕີ (La Lutte) ຫນັງສືພິມລາຍວັນຝຣັ່ງ ຢູ່ ໄຊ່ງ່ອນ ສະບັບນຶ່ງ ມັກນຳສະ ເຫນີທັດສະນະຂອງຝ່າຍ ນິຍົມໂຕຣສກີ ເປັນປະຈຳ.

ການຢຸດພັກອັນແປກປະຫລາດ (ປະມານ ປີ 1936-1939) ເປັນຫມາກຜົນນຶ່ງ ຂອງການເມືອງ ພາຍໃນຂອງຝຣັ່ງ, ການເຄື່ອນໄຫວການເມືອງແບບຖືກຕ້ອງຕາມກົດຫມາຍຈຶ່ງສາ ມາດດຳເນີນການ ຜ່ານກຸ່ມແນວໂຮມໄດ້, ພັກຄອມມູຍນິດອິນໂດຈີນ ໄດ້ຄາດຄະເນ ແລະກໍໄດ້ຮັບການປາບ ປາມຢ່າງ ໂຫດຫ້ຽມ ຈາກຝ່າຍລັດຖະບານອານານິຄົມ. ໃນປີ 1930 ເມື່ອສະພາບເສດຖະກິດໂລກຕົກຕ່ຳສຸດ ຂີດແລະ ຄວາມຫລົ້ມຈົມຂອງລາຄາເຂົ້ານັ້ນເອງ ເຮັດໃຫ້ພັກຕ້ອງໃຊ້ຄວາມຮຸນແຮງເປັນເຫື່ອທຳອິດເພື່ອ ອຳນາດ ຄືການສ້າງສະພາຊົນນະບົດ "ໂຊວຽດ" ຢູ່ໃນເຂດພາກເຫນືອ-ກາງ ຂອງແຂວງ ເຫງ້ອານ ແລະ ຣາຕິນຫ໌. ແຫລ່ງຂ່າວຂອງຝ່າຍຄອມມູຍນິດ ອ້າງວ່າ ປີ 1930-1931, ການເດີນຂະບວນຂອງຊາວນາຢູ່ ຫວຽດນາມ ເກີດຂຶ້ນ 535 ເທື່ອ ໃນນັ້ນມີຄົນເຂົ້າຮ່ວມ ເຖິງ 500,000 ຄົນ ຢູ່ໃນຊາວຫ້າແຂວງ, ສະພາ "ໂຊວຽດ" ເຊິ່ງ ກໍ່ຕັ້ງຂຶ້ນຢູ່ໃນປ່ອງຫວ່າງ ປົກຊ້າຍ ໂດຍນັກບໍລິຫານທ້ອງຖິ່ນ ທີ່ຫລົບຫນີມາຈາກການບາບ ຂູ່ຂອງພັກ ທີ່ຈັດຕັ້ງມາກ່ອນ, ໄດ້ຈັດພິມຫນັງສືພິມ ໃຕ້ດິນ ຂອງພວກຕົນອອກສະບັບນຶ່ງຕ່າງຫາກ - ເຊັ່ນ ເຫງ້ ອັນ ໂດ (ຊາວເຫງ້ອັນແດງ)ແລະເລີ່ມນຳເອົາສັນຍະລັກສາກົນເຂົ້າມາຢູ່ໃນຫວຽດນາມ ເຊັ່ນ ວັນກຳມະກອນສາກົນ ທີ 1 ພຶດສະພາ ແລະ ທຸງແດງ. ອັນສຳຄັນຍິ່ງກວ່ານີ້ ກໍແມ່ນວ່າ ພວກເຂົ້າໄດ້ໃຫ້ສັນຍາຢ່າງ ບໍ່ເປັນທາງ ການ ກັບຊາວນາ ເລື່ອງການຈັດແບ່ງທີ່ດິນຄືນໃຫມ່, ບັນຫາເລື່ອງດິນກຳລັງເປັນຈຸດນຶ່ງທີ່ພັກ VNQDD ບໍ່ໃຫ້ຄວາມສຳຄັນ. ໂດຍການຍົກສູງເລື່ອງຄວາມສາມັກຄີລະຫວ່າງຊາວຜູ້ອອກແຮງງານ ໃນເມືອງ ກັບ ຊາວນາຊົນນະບົດແລ້ວ ຄະນະກຳມະການພັກ ໄດ້ຈັດສົ່ງກຳມະກອນຄອມມູຍນິດ ຂອງໂຮງງານ ໃນຕົວ ເມືອງວິນຫ໌ ອອກສູ່ເຂດຊົນນະບົດ ເພື່ອຂະຫຍາຍຖັນແຖວຊາວນາຜູ້ຫ້າວຫັນ ໃນເລື່ອງການເມືອງ. ມາ ເຖິງຍາມຮ້ອນປີ 1931 ກອງທະຫານຝຣັ່ງ ໄດ້ບີບບີ້ພວກສະມາຊິກສະພາ ໂຊວຽດ. ຢ່າງໃດກໍດີ ມາຮອດປີ 1941 ສິບປີຕໍ່ມາ ເສັ້ນທາງເດີນຂອງພັກຈຶ່ງສົມທົບເຂົ້າຢ່າງສະຫນິດ ແທນ້ນກັບຂອງຝ່າຍຊາດນິຍົມ ຫວຽດນາມ ໂດຍທົ່ວໆໄປ ແບບບໍ່ເຄີຍມີມາກ່ອນ ແລະ ທີ່ຕ້ອງປັບປຸງ ໃຫ້ມີຄວາມຫມາຍສົມບູນຂຶ້ນອີກ.

ມາເຖິງຊຸມປີ 1940 ໃນຄວາມເປັນຈິງແລ້ວ ຂະບວນການລັດທິຊາດນິຍົມໄດ້ຕົກຢູ່ໃນກຳມືຂອງຊົນ ຊັ້ນປັນຍາຊົນບໍ່ຫລາຍກໍຫນ້ອຍ. ອາດມີການຄັດຄ້ານໄດ້ວ່າ ສະພາບເງື່ອນໄຂທາງສັງຄົມ ເສດຖະກິດ ຂອງຊາວນາຫວຽດນາມ ໃນປີ1935 ນັ້ນ ຂີ້ຮ້າຍຍິ່ງກວ່າທີ່ເຄີຍເປັນມາໃນສະຕະວັດກ່ອນຊ້ຳ ຍ້ອນການ ເກັບພາສີແບບໃຫມ່, ໂດຍສະເພາະພາສີເກືອ ແລະ ເຫລົ້າເຂົ້າ; ຍ້ອນຄວາມລົ້ມແຫລວໃນການກວດກາ ລະບອບຄອບຄອງທີ່ດິນຂອງລາຊະວົງ, ເຊິ່ງໄຮ້ປະສິດທິພາບ, ຍ້ອນການສົ່ງອອກເຂົ້າເຊິ່ງໃນຍຸກກ່ອນສຳ

ລັບອາບານິຄົມ ເຂົ້າ ແມ່ນຜະຫລິດເພື່ອບໍລິໂພກພາຍໃນ ຫວຽດນາມ ເທົ່ານັ້ນ; ຍ້ອນຄວາມກົດດັນ ດ້ານ ພົນລະເມືອງຊາວນາ ທີ່ຫລາຍຂຶ້ນໃນດິນແດນເຂດເໜືອ ແລະ ຍ້ອນຄວາມຫ້ຖອຍຂອງຊາວນາ ທີ່ເຫັນ ຄວາມປ່ຽນແປງລາຄາເຂົ້າ ແລະເຄື່ອງອຸປະໂພກອື່ນໆ ໃນຕະຫລາດໂລກ. ແມ່ນວ່າສະຖານະການ ໃນຊົນ ນະບົດຍັງຄົງສະຫງົບຮຽບຮ້ອຍ ມາຈົນເຖິງລະຍະທ້າຍໆ ຂອງສົງຄາມໂລກຄັ້ງທີ 1 ກໍຍັງມີຊາວ ຫວຽດ ນາມກວ່າ 100,000 ຄົນ ຖືກສົ່ງໄປປະເທດຝຣັ່ງ ໂດຍທີ່ບໍ່ພໍໃຈປານໃດ ເພື່ອໄປເປັນທະຫານ ແລະກຳມະ ກອນສົງຄາມ, ຂະນະທີ່ ຫນ່ວຍທະຫານຝຣັ່ງ ປະຈຳການຢູ່ອິນໂດຈີນເອງ ກໍຫລຸດລົງ ຄືມີບໍ່ຮອດ 3000 ຄົນ. ແມ່ນແຕ່ ເມື່ອມາເຖິງປາຍຊຸມປີ 1930 ຊົນຊັ້ນກຳມາຊີບຫວຽດນາມ ໂຮມທັງກຳມະກອນ ບໍ່ແຮ່ ແລະ ກຳມະກອນປູກຝັງ ກໍຍັງມີບໍ່ກາຍ ສອງແສນຄົນ, ຕົວເລກທີ່ອ່າວຕ່ຳນີ້ ບີບບັງຄັບໃຫ້ພວກຄອມມູຍນິດ ໃນ ເວລານັ້ນ ແຕ່ງສ້າງ ແລະເຜີຍແຜ່ຄຳຂວັນຂອງສະພາໂຊວຽດ ທີ່ມີຄວາມຫມາຍດ້ານສັງຄົມວິທະຍາ ແຕ່ຍັງເປັນບັນຫາໃນດ້ານ ທິດສະດີຄຳສອນຄື "ຄົນທຸກຈົນ ແມ່ນຊົນຊັ້ນກຳມາຊີບ".

# ບົດທີ 29 ປະເທດ ສະຫຍາມ

ປະຫວັດສາດສະຫຍາມ ໃນລະຍະການສະຫວັນນະຄົດຂອງ ເຈົ້າຊີວິດຈຸລາລົງກອນ (ພຣະຈຸລະ ຈອມເກົ້າເຈົ້າຢູ່ຫົວ) ປີ 1910 ແລະ ການລະເບີດສົງຄາມໂລກຄັ້ງທີສອງປີ1941 ເປັນບາດລ້ຽວທາງການ ເມືອງສຳຄັນ ຈາກຜົນສະທ້ອນທາງສັງຄົມ ເນື່ອງຈາກການປະຕິຮູບລະບົບ ການປົກຄອງຂອງ ເຈົ້າຊີວິດ ພະຈຸລະຈອມເກົ້າ. ພະອົງ ແລະ ເສນາບໍດີ ໄດ້ປ່ຽນແປງໂຄງສ້າງຂອງລາຊະອານາຈັກຂັ້ນພື້ນຖານ ຊົ່ງ ກຳນົດອຳນາດໜ້າທີ່ຂອງກະສັດ ເພື່ອຊັ່ງຊາກັບອຳນາດຂອງພວກ ຂຸນນາງເກົ່າ, ຊີ້ນຳການຈັດລະບຽບ ໃໝ່ແລະເຮັດໃຫ້ການປົກຄອງ ບ່ຂຶ້ນຢູ່ກັບບຸກຄົນໃດບຸກຄົນນຶ່ງໂດຍກົງ ແລະ ສ້າງຊົນຊັ້ນອ້າລາຊະການພົນ ລະເຮືອນຂຶ້ນໃໝ່ ໂດຍເຮັດໃຫ້ພວກເຂົາ ມີສະຖານະພາບຖືກຕ້ອງຕາມກົດໝາຍ ຕາມການສຶກສາ ແລະໜ້າທີ່ຕຳແໜ່ງ ທີ່ພວກເຂົາສັງກັດຢູ່ຕາມລະບົບຈັດແບ່ງຂັ້ນອ້າລາຊະການ. ພວກເຂົາໄດ້ຫລຸດຜ່ອນ ອຳນາດຂອງຕະກູນຈຸ້ມເຈື້ອທີ່ເປັນເຈົ້າປົກຄອງທ້ອງຖິ່ນ ໃນແຂວງຕ່າງໆ ແລະ ຄອບຄົວພວກຂຸນນາງໃນ ເມືອງຫລວງ. ເຖິງແນວໃດກໍດີ ລະບົບອ້າລາຊະການນັ້ນ ກໍໄດ້ຫຍັບມ່ເຂົ້າເກືອບເຕັມວົງມົນຢ່າງເປັນຕາ ຢ້ານກົວ, ຄວາມໜັ້ນຄົງ ແລະປະສິດທິພາບຂອງລັດຖະບານ ຍັງຄົງອາໄສການຄວບຄຸມແບບສ່ວນຕົວ ຂອງພຣະເຈົ້າຊີວິດ ຢູ່ເໜືອລະບົບອ້າລາຊະການ. ພະເຈົ້າຊີວິດເຮັດໃຫ້ພະອົງເອງເປັນເອກະລາດໃນບາງ ເລື່ອງ ຈາກພິທີກຳທີ່ບ່ສຳຄັນ ເພື່ອແທ່ແໜນພະອົງ, ແຕ່ຜັດຊົ່ງກຽວຂ້ອງໂດຍກົງກັບວຽກງານປະຈຳ ວັນຂອງລັດຖະບານ. ໃນຂະນະທີ່ອຳນາດໜ້າທີ່ສ່ວນຕົວ ຂອງພະອົງ ຂະຫຍາຍອອກໄປ ອຳນາດນັ້ນ ກໍຫມິ່ນມ່ຕໍ່ການທ້າທາຍຫລາຍຂຶ້ນນຳ. ການຂະຫຍາຍແລະການປັບປຸງລະບົບລາຊະການໃຫ້ດີຂຶ້ນ ເຮັດໃຫ້ ສາມາດຕອບສະໜອງຄວາມປະສົງ ໂດຍກົງຂອງພະອົງ ໄດ້ຫລາຍຂຶ້ນ ແຕ່ໃນລະຍະຍາວ ອຸດົມການ ແລະ ໜ້າທີ່ແບບຕາເວັນຕົກ ກໍໄດ້ເຮັດໃຫ້ບ່ສາມາດຄວບຄຸມການບໍລິຫານວຽກງານ ພາຍໃນຂອບເຂດ ອຳນາດຂອງກະສັດ ຕາມປະເພນີໄດ້.

ມີປະໂຫຍດຢູ່ບ່ໜ້ອຍທີ່ຈະສຳນຶກຄືນປະຫວັດສາດສະຫຍາມ ຫລື ໄທ ຍຸກສະໄໝມໃໝ່ ໃນຄວາມ ໝາຍກ່ຽວກັບຄົນຮຸ່ນຕ່າງໆ ໂດຍອີງໃສ່ວ່າ ກຸ່ມຜູ້ຄົນເຫລ່ານັ້ນຮຸ່ນສືບຕ່ມາໄດ້ເຂົ້າສູ່ວົງການອຳນາດລັດ ໃນສະຫຍາມ ອາດຖືກກຳນົດໃຫ້ສຳພັນກັບການປ່ຽນແປງດ້ານແນວຄຶດ ແລະປະສົບການ. ຄວາມແຕກ ຕ່າງຫ່າງໄກກັນທາງດ້ານສະຕິປັນຍາ ແລະ ຈິດຕະສາດ ອັນແບ່ງແຍກຫລາຍໆຮຸ່ນຄົນ ຕິດຕ່ກັນ ມີຄວາມ ສຳຄັນເປັນພິເສດ ໃນຍຸກແຫ່ງການປ່ຽນແປງຄັ້ງຍິ່ງໃຫຍ່ແບບນີ້ ດ້ວຍວ່າໃນສະຕະວັດຕ່ມານັ້ນເອງ ໄດ້ມີ ການເຊັນສັນຍາ ເບີຣເນ ປີ 1826 (Burney Treaty) ຄົນໃນຮຸ່ນ ຂອງລັດຊະການທີສີ່ ຄື ພະມຸງກຸດ ກັບ ພະຍາສີສຸຣິຍະວົງ ເຊ່ິງຂຶ້ນກຳອຳນາດໃນຊຸມປີ 1850 ແມ່ນຮຸ່ນທຳອິດ ທີ່ຕ້ອງປະເຊີນໜ້າກັບຕາເວັນຕົກ ແລະ ປັບປ່ຽນຕົນເອງໃຫ້ເຂົ້າກັນໄດ້. ໃນຂັ້ນທຳອິດ ກໍໄດ້ເຮັດໄປໃນນາມເປັນຄ່ານິຍົມຕາມປະເພນີ. ເບ່ິງອີກ ດ້ານນຶ່ງ ຄົນໃນຮຸ່ນ ເຈົ້າຊີວິດ ຈຸລາລົງກອນ ຕ້ອງກາຍເປັນຮຸ່ນທີ່ຫັນມາສູ່ຄວາມທັນສະໄໝ. ຈຶ່ງຕົກເປັນ ພາລະຂອງ ເຈົ້າຊີວິດ ຈຸລາລົງກອນ, ກົມພະຍາດຳລົງ ແລະ ພະຍາເທວາວົງ ທີ່ຕ້ອງກ່ໍຕັ້ງລັດທັນສະໄໝ ຕາມແບບຕາເວັນຕົກ ໂດຍເລືອກເຟັ້ນເອົາຈາກສະຖາບັນທັງຫມົດໃນຕາເວັນຕົກ ແລະແນວຄວາມຄຶດທັງ ຫມົດເຂົ້າ ມາທັງສາມຄົນນີ້ບ່ໄດ້ຕັ້ງບັນຫາກ່ຽວກັບຄຸນຄ່າຂອງມັນ ພຽງແຕ່ຮູ້ຈັກຜ່ານຄົນອື່ນອີກຕ່ໍນຶ່ງ. ທີ່ຮຸ່ນທີ່ສາມ ເຕີບໃຫຍ່ຂຶ້ນ ຈົນວ່າມາຮອດໃນຂອບໂຄງທີ່ທ່ານທັງສາມສ້າງຂຶ້ນ ຈຶ່ງມາປະເຊີນໜ້າກັບ ບັນຫາການປະນີປະນອມ ໃນຂອດຂັດແຍ່ງ ເຊ່ິງ ເຈົ້າຊີວິດຈຸລາລົງກອນ ບ່ເຄີຍຮັບຮູ້ມາກ່ອນ. ຄວາມຂັດ ແຍ່ງເຫລ່ານີ້ ເປັນຜົນສະທ້ອນມາຈາກການຫັນປ່ຽນປະເທດໃຫ້ທັນສະໄໝ ທີ່ເລີ່ມຕົ້ນມາແຕ່ຂັ້ນເທິງ, ນັ້ນຄືໂຄງຮ່າງຊັ້ນສູງສຸດ ຂອງ ລະບົບອ້າລາຊະການແບບສະໄໝມໃໝ່ ແລະສະຖາບັນເສດຖະກິດທີ່ວາງ ສັງຄົມ ແລະລັດໄວ້ສູງສຸດ ພາກສ່ວນບຸກຄົນຊັ້ນລຸ່ມສຸດ ບ່ສາມາດຢູ່ໄດ້ຢ່າງສອດຄ່ອງໃພາຍໃນລະບອບ

ສົມບູນລະນາຍາສິດທິລາດ ໄດ້ອີກຕໍ່ໄປ. ພວກເສນາບໍດີ ກັບຫົວໜ້າກົມກອງຕ່າງໆໃນປີ 1910 ນຸ່ງຖືແບບເອີລົບ ດຳລົງຊີວິດຢູ່ຖ້ຳມກາງຫນ່ວຍເປຽໂນຂະຫນາດໃຫຍ່ ແລະປົ້ມໃນເຮືອນຫລັງທັນສະໄຫມ ທີ່ມີຫ້ອງນ້ຳໃນເຮືອນ, ດື່ມນ້ຳເຢັນໃສ່ນ້ຳກ້ອນ ແລະເວລາກິນ ກໍໃຊ້ບ່ວງສ້ອມເງິນແບບເອີຣົບ, ດຳເນີນວຽກງານດ້ວຍປະມວນກົດຫມາຍໃຫມ່ ແລະລະບຽບການປົກຄອງໃຫມ່, ລົງທຶນເອົາເງິນທ້ອນໄປຝາກ ໄວ້ທະນາຄານທັນສະໄຫມ ຫລື ເຮັດທຸລະກິດ. ໃນເວລາດຽວກັນ ຊາວນາໃນສະຫຍາມຍັງຄົງມີຊີວິດ ຢູ່ແບບດຽວກັບ ທີ່ພວກເຂົາເຄີຍຢູ່ມາແລ້ວເມື່ອຮ້ອຍປີກ່ອນ ພາຍໃນເຮືອນເສົາຕັ້ງແບບບໍ່ແຫນ້ນຫນາຖາວອນ ບໍ່ມີເຄື່ອງໃຊ້ສອຍໃດໆ ປູກເຂົ້າກິນ ແລະຂາຍສ່ວນເຫລືອຢູ່ຕະຫລາດ. ຄວາມບໍ່ຕິດຕໍ່ເນື່ອງ ລະຫວ່າງ ສອງອານາຈັກແຫ່ງປະສົບການ ປາກົດອອກຈະແຈ້ງກວ່າ ໃນສາຍຕາຂອງກຸ່ມຄົນຊັ້ນກາງ ເຊັ່ນ ພວກ ນາຍທະຫານຊັ້ນນ້ອຍ ຄູສອນ ແພດຫມໍ ແລະພໍ່ຄ້າຊາວຂາຍ ຜູ້ເຊິ່ງສາມາດແນມເຫັນທັງສອງດ້ານ ຂອງການແບ່ງແຍກ ຕາມແບບປະເພນີ ແລະແບບທັນສະໄຫມ ຢູ່ພາຍໃນສັງຄົມສະຫຍາມ. ພວກເຂົາເປັນຮຸ່ນທຳອິດ ຂອງສະຫຍາມ ທີ່ມີຈຳນວນຫລາຍເຕີບ ທີ່ໄດ້ຮັບການຝຶກອົບຮົມໃນຕ່າງປະເທດ. ຢ່າງໃດກໍຕາມ ເຖິງແມ່ນວ່າພວກຊົນຊັ້ນສູງ ໃນລະບົບອ້ຳລາຊະການຂອງພວກເຂົາ ເປັນຜູ້ສະຫລາດສ່ອງໃສ ແຕ່ກໍຍັງມີຮອງແຍກໃນດ້ານແນວຄວາມຄຶດ ແລະປະສົບການ ຂັ້ນກາງລະຫວ່າງພວກເຂົາຢູ່. ໂດຍອາໄສຄວາມຊຳນານ ຜ່ານການຝຶກຝົນມາຂອງພວກເຂົາ ວິທີການຄຶດ, ຄວາມຫມັ້ນສັນຍາທາງການເມືອງແບບເສລີນິຍົມ ໂດຍທົ່ວໆໄປຂອງພວກເຂົາ, ສະມາຊິກຂອງຄະນະ ຜູ້ຜ່ານການຝຶກຝົນມາແຕ່ຕ່າງປະເທດ ກໍຮູ້ສຶກວ່າ ພວກເຂົາສົມຄວນໄດ້ມີສ່ວນແບ່ງໃນອຳນາດ ຫລາຍກວ່າທີ່ກົດລະບຽບທີ່ມີຢູ່ນັ້ນ ມອບໃຫ້. "ແນວຄຶດຊາດນິຍົມ" ຂອງພວກເຂົາ ທຳອິດກໍເກີດຂຶ້ນເປັນຊຸດໆ ແລ້ວການໂຄສະນາປຸກລະດົມກໍສະແດງອອກເປັນ ຄວາມຮຽກຮ້ອງດ້ວຍຖ້ອຍຄຳທີ່ໃຫ້ທັງດ້ານລົບ ແລະ ດ້ານບວກ. ໃນດ້ານບວກ, ພວກເຂົາເວົ້າເຖິງຄວາມຫມາຍຫມັ້ນຢາກຫັນປ່ຽນໄປສູ່ຄວາມທັນສະໄຫມ ເພື່ອສືບຕໍ່ພົວພັນກັບໂລກພາຍນອກ, ແຕ່ໃນເວລາດຽວກັນ ພວກເຂົາກໍຕິລາຄາວ່າ ສະຫຍາມ ຕ້ອງການຫລາຍກວ່ານີ້ ແລະເຫັນວ່າ ຍັງຊັກຊ້າໂພດ ພວກເຂົາກໍຄຶດຢາກໃຫ້ສະຫຍາມເປັນເອກະພາບ ປະກອບດ້ວຍເສັ້ນກຳນົດຜົມແດນອັນແນ່ນອນ ແລະມີປະຊາຊົນ ປາກເວົ້າພາສາສະຫຍາມພາສາດຽວ ແລະດ້ວຍການໃຫ້ຄຳປະຕິຍານຈົງຮັກພັກດີ ຕໍ່ພະມະຫາກະສັດ ແລະລັດ ຢ່າງດຽວ. ໃນດ້ານລົບ, ພວກເຂົາຄຶດວ່າ ອຳນາດຂອງພວກເຂົາ ຄວນໄດ້ຕໍ່ສູ້ກັບການແບ່ງແຍກທາງ ເສດຖະກິດ ການເມືອງ ແລະສັງຄົມ ທີ່ຍັງເຫລືອຄ້າງຢູ່ແລ້ວ ດ້ວຍການເຕີບໃຫຍ່ ຄຽງຄູ່ກັບຊາດ ແລະຕ້ານກັບຄວາມອະຍຸຕິທຳ ທີ່ພວກເຂົາຮູ້ສຶກວ່າ ປະເທດຊາດ ໄດ້ສູ້ທົນຜ່ານຜ່າມາແລ້ວ ແລະຍັງສືບຕໍ່ສູ້ທົນອີກ ພາຍໃຕ້ເງື້ອມມືຂອງຈັກກະພັດຕາເວັນຕົກ.

ແນວຄວາມຄຶດ ແລະປະສົບການຂອງຄົນຮຸ່ນໃຫມ່ແຫ່ງຊຸມປີ 1910 ຖືກປັບປຸງໃຫ້ເປັນຮູບເປັນຊົ່ງຂຶ້ນ ໂດຍການຍອມຮັບທົ່ວໄປຂອງຊາດຕາເວັນຕົກ ເຊິ່ງ ເຈົ້າຊີວິດຈຸລະຈອມເກົ້າ ກັບພະອະນຸຊາທັງຫລາຍຂອງພະອົງ ໄດ້ນຳມາໃຊ້ກັບປະເທດຊາດ ແລະບຸກຄົນເຫລົ່ານັ້ນກໍແນມເຫັນບັນຫາພື້ນຖານ ຈະແຈ້ງກວ່າພວກຂຸນນາງກັບພວກຊາວນາ ນັ້ນຄື ບັນຫາທຸລະກິດທີ່ຍັງບໍ່ສຳເລັດ ແລະການປ່ຽນແປງ ທີ່ຍັງບໍ່ສົມບູນ ຄື ດ້ານການເມືອງເສດຖະກິດ ແລະ ສະຕິປັນຍາ ຫລື ວັດທະນະທຳ ເຊິ່ງຍັງຄົງຄຸກຄາມ ຍິ່ມຢູ ປະເທດຊາດຢູ່. ທາງດ້ານການເມືອງ ພະຈຸນລະຈອມເກົ້າ ແລະເສນາບໍດີທັງຫລາຍຮູ້ສຶກເຖິງ ບັນຫາອັນສຳຄັນຂອງ ລະບອບສົມບູນລະນາຍາສິດທິລາດ ໃນຄວາມຕື່ນຕົວຕໍ່ສິດຜົນປະໂຫຍດທາງ ການເມືອງທີ່ສູງຂຶ້ນເລື້ອຍໆ ໃນວົງການລາຊະການ ເຊິ່ງບໍ່ສາມາດຖືກບັນຈຸໄວ້ໃນຊ່ອງທາງອັນຄັບແຄບ ຂອງການຈັດແບ່ງລຳດັບຊັ້ນໃນວຽກງານບໍລິຫານ. ເບິ່ງໃນດ້ານເສດຖະກິດ ຊົນຊາດຈີນສ່ວນນ້ອຍໃນສະຫຍາມ ຍັງຄອບຄອງຕຳແຫນ່ງບັນຊາການຢູ່ໃນຊີວິດເສດຖະກິດຂອງປະເທດ ໃນປີ 1910, ນັບມື້ກໍຍິ່ງຮູ້ສຶກວ່າ ຮູບແບບການດຳລົງຊີວິດ ແລະວິທີການເຮັດວຽກຂອງພວກເຂົາເປັນສິ່ງແປກຕ່າງຢູ່. ອຳນາດຂອງຄົນຈີນເຫນືອຄົນສະຫຍາມ ຖືກສະແດງອອກອອກຢ່າງເຕັມປ່ຽມໃນການປະທ້ວງລະຍະສັ້ນໆ ເມື່ອປີ 1910 ເພື່ອຕ່ຳຕ້ານການເກັບພາສີ ລະດັບດຽວກັນກັບທີ່ເກັບນຳຄົນສະຫຍາມ. ປະຕິກິລິຍາຕອບໂຕ້ຊາວຈີນ ໃນອັນດັບຕໍ່ມາ ມີຜົນໃນທາງລົບ ຢ່າງ

ກ້ວ້າງຂວ້າງ ດ້ວຍມັນຖືກເລັ່ງໃສ່ການຕໍ່ຕ້ານ ລັດທິວັດຖຸນິຍົມຂອງຊາວຈີນ ແລະຂອງພຶດຕິກຳ ທີ່ມີລັກສະນະບໍ່ເປັນຄົນສະຫຍາມ ຂອງພວກເຂົາ ແຕ່ມັນກໍມີຜົນຮັບໃນທາງບວກຢູ່ແດ່ ຄືໄດ້ເຮັດໃຫ້ຄົນສະຫຍາມຮຸ່ນໃຫມ່ ມີຄວາມຍຶດຫມັ້ນ ຍືນຍັດ ສັດທາ ໃນຄ່ານິຍົມແບບສະຫຍາມ.

ຍ້ອຍ້ອນຜ່ານຮຸ່ນຄົນ ແລະຊົ່ນຊັ້ນສຳຄັນຍ້ອນຶ່ງ ທີ່ຊ່ອຍດຶ່ງຈ່ອງສັງຄົມໄວ້ໃຫ້ຢູ່ນຳກັນ ແມ່ນພຸດທະສາສະຫນາ. ການຫັນປ່ຽນສາສະຫນາໃຫ້ທັນສະໄຫມຢູ່ໃນສະຫຍາມ ສ່ວນນຶ່ງຖືກປຸ້ງແຕ່ງແປ້ງໂສມ ກໍ ຍ້ອນການພົວພັນກັບຝ່າຍຕາເວັນຕົກເທົ່ານັ້ນ. ສ່ວນໃນ ພະມ້ຳ ການທີ່ລັດຖະບານອານານິຄົມຂອງ ອັງກິດ ປະຕິເສດອຳນາດຫນ້າທີ່ຂອງຄະນະສົງນັ້ນຫມາຍຄວາມວ່າ ບໍ່ມີພວກນິກາຍສະໄຫມນິຍົມໃດ ສາມາດຈັດ ຕັ້ງ ແລະເປັນທີ່ຮັບຮູ້ ເຖິງວ່າມີພະສົງບາງອົງເຊັ່ນ ຄະນະ ເລດີ ຊະຍະດໍ (Ledi Sayadaw) ເຊິ່ງມີອິດທິ ພົນສູງຕໍ່ແນວຄຶດທັນສະໄຫມທາງສາສະຫນາແລະສັງຄົມ, ເຫດການຢ່າງນັ້ນແຕກຕ່າງກັນຫລາຍ ໃນສະ ຫຍາມ. ຢູ່ສະຫຍາມນັ້ນ ການຫັນປ່ຽນພຸດທະສາສະຫນາໃຫ້ທັນສະໄຫມມີມາກ່ອນອິດທິພົນຂອງ ແນວຄຶດ ຕາເວັນຕົກ ຊ້ຳອີກ. ເຈົ້າຊາຍນັກບວດ ພະມຸງກຸດ ເອງ ມີຄວາມປະສົງສະແຫວງຫາປະສົບການ ທາງສາ ສະຫນາອັນເຕັມໄປດ້ວຍຄວາມຫມາຍ, ໃນປີ 1829 ພະອົງໄດ້ກໍ່ຕັ້ງ ຂະບວນການປັນຍາຊົນຂຶ້ນ ພາຍໃຕ້ ຮົ່ມພະພຸດທະສາສະຫນາ ໂດຍອີງໃສ່ຫລັກການວິໄຈສຶກສາແບບເລິ່ງເຊິ່ງກວ້ວ້າງຂວ້າງ ແລະລະມັດ ລະວັງ ໃນພະຄຳພີປິດົກ. ຜົນໄດ້ຮັບກໍຄື ຕ້ອງສ້ວ້າງປະເພນີ ທີ່ປົກປ້ອງສະຕິສຳນຶກຕົນເອງ, ສາສະຫນາທີ່ມີຊີວິດ ປະກອບດ້ວຍຄ່ານິຍົມ ແລະແນວຄວາມຄຶດຕົ້ນຕໍ ຂອງພະພຸດທະສາສະຫນາ ແລະບໍ່ຂັດກັບປະເພນີເກົ່າ ແກ່ຂອງທ້ອງຖິ່ນທີ່ສືບທອດມາແຕ່ກ່ອນ. ນີ້ແມ່ນຂອບໂຄງຫນ້ວ້າວຽກອັນສະຫລາດສະຫລຽວທີ່ ພະມຸງກຸດ ແລະພະສົງສາວົກຂອງພະອົງ ສາມາດປັບຕົວເຂ້ົ້າກັບວິດທະຍາສາດຕາເວັນຕົກ ແລະໂລກທີ່ກວ້ວ້າງກວ່າ ໂລກກຳນົດໂດຍຈັກກະວານ ແລະ ສິນທຳ ແບບເກົ່າຕາມປະເພນີ. ຍ້ອນເຫດຜົນທາງການເມືອງ ເປັນຕົ້ນ ຕໍ ນິກາຍສາສະຫນາພຸດ ທີ່ພະມຸງກຸດ ກໍ່ຕັ້ງຂຶ້ນໃນຊຸມປີ 1930 ຈຶ່ງບໍ່ໄດ້ມີສະຖານະພາບ ຢ່າງເປັນທາງ ການ ໃນນາມເປັນນິກາຍຫນຶ່ງຕ່າງ ຫາກ ຄື ນິກາຍທຳມະຍຸດ ມາຈົນຮອດສະໄຫມຂອງ ເຈົ້າຊີວິດ ຈຸລາ ລົ້ງກອນ (ລາຊະການທີ 5) ເຊິ່ງເວລານັ້ນ ທຳມະຍຸດ ໄດ້ແຜ່ລາມອອກສູ່ຫົວເມືອງຕ່າງໆຮອດປະເທດ ລາວ ແລະຂະເຫມນ. ເຖິງແມ່ນວ່າ ນິກາຍທຳມະຍຸດ ຍັງເປັນນິກາຍນ້ອຍໆພາຍໃນພະພຸດທະສາສະຫນາ ຂອງສະຫຍາມ ແຕ່ກໍນັບວ່າເຂັ້ມແຂງ ແລະມີອິດທິພົນລົ້ນຂະຫນາດ ນັບແຕ່ຊຸມປີ 1880 ເປັນຕົ້ນມາ. ພາຍ ໃຕ້ການນຳພາຂອງ ສົມເດັດພະມະຫາສົມມະນະ ວະຊິຣະຍັນວະໂຣຣົດ (ພະອະນຸຊາຂອງເຈົ້າຊີວິດຈຸລາລົ້ງ ກອນ), ທຳມະຍຸດ ກາຍເປັນກຳລັງອັນສຳຄັນຫລາຍ ສຳລັບຄວາມທັນສະໄຫມຂອງການສຶກສາທັ້ງທາງ ໂລກ ແລະທາງສາສະຫນາ, ດ້ວຍວ່າເຈົ້າຊາຍ ວະຊິຣະຍັນວະໂຣໂຣົດ ແລະ ຄະນະສົງຂອງພະອົງໄດ້ຈັດ ຕັ້ງໂຮງຮຽນຂຶ້ນໃນຕ່າງແຂວງ ແລະໄດ້ສ້ວ້າງລະບົບສະມະສັກແຫ່ງຊາດຂຶ້ນໃນທົດສະວັດຕໍ່ມາຫລັງປີ 1898. ມີ ພະສົງທຳມະຍຸດອົງນຶ່ງ ຊື່ວ່າ ພະທຳມະທິຣະຣາດມຸນີ(ຈັນຫ໌) ໄດ້ເຫດສະຫນາຄັດຄ້ານການ ເຂ້ົ້າຮ່ວມ ສັງຄົມໂລກຄັ້ງທີ1 ຂອງສະຫຍາມ. ນອກຈາກນັ້ນຍັງມີການເຫດສະຫນາ ແລະການຂຽນອື່ນໆທີ່ມີອິດທິພົນ ເຮັດໃຫ້ພະພຸດທະສາສະຫນາໃນ ສະຫຍາມ ກາຍເປັນກຳລັງທາງ ສະຕິປັນຍາທີ່ເອ້ືອອຳນວຍສ້ວ້າງປັນຍາ ການ ໃຫ້ແກການຮັບເອົາວິທະຍາສາດທັນສະໄຫມ ແລະແນວຄຶດຕາເວັນຕົກໂດຍທົ່ວໆໄປໄດ້ຢ່ວ້າງບໍ່ຂັດເຂີນ. ຄວາມແຂງຂັນຫ້ວ້າວຫັນຂອງຄະນະສົງໃນ ສະຫຍາມ ບໍ່ແມ່ນຜົນງ່ວ້ານການເຄ່ືອນໄຫວ ແຕ່ຂອງຄະນະສົງ ທຳມະຍຸດ ເທົ່ານັ້ນດອກ ແຕ່ຫາກເປັນຜົນງ່ວ້ານຂອງສະຖາບັນສາສະຫນາແຫ່ງນຶ່ງ ທີ່ສາມາດຜ່ອນຜັນ ຮັບເອົາການແບ່ງແຍກ ແລະຄວາມແຕກຕ່ວ້າງ ແລະສາມາດຮັບໃຊ້ຜົນລະເມືອງທັງຫມົດທີ່ນັບມ້ື ນັບຫ່ວ້າງ ເຫີນກັນທັ້ງໃນເລ່ືອງຂອງການສຶກສາ ແລະຄວາມກັງວົນສົນໃຈປະຈຳວັນ.

ຢ່ວ້າງໃດກໍດີ, ວັດທະນະທຳທາງໂລກໃນ ສະຫຍາມ ກໍຍັງຖືກຍ່ົ້ມຢູ່ ໂດຍອິດທິພົນອັນແຜ່ລາມໄວຂອງ ແນວຄຶດຕາເວັນຕົກຢູ່. ຕົວຢ່ວ້າງ, ຕ້ອງໄດ້ໃຊ້ເວລາຢູ່ຫລາຍທົດສະວັດກ່ອນທີ່ຊົ່ນຊັ້ນສູງຈະສາມາດແນ່ໃຈວ່າ ພາສາຊາດຂອງຕົນ ຕ້ອງຮັກສາຄວາມມີຊີວິດຊີວາໄວ້ຢ່ວ້າງຫນັກແຫ້ນ ເພ່ືອປະເຊ່ີນຫນ້າກັບຄຳສັບພາ ສາຕ່ວ້າງປະເທດ (ຄຳສັບໃຫມ່ໄດ້ຖືກສ້ວ້າງຂ້ຶ້ນຈາກຣາກຄຳສັນສະກິດ) ຫລື ແນ່ໃຈວ່າ ວັນນະກຳສະຫຍາມ

ສາມາດຍຶດຖານະອັນສົມກຽດ ຂອງມັນຢູ່ໃນທ້ອງຟ້າແຫ່ງປັນຍາຂອງບັນດາ ທ່ານ ສຸພາບບຸລຸດ ຊາວສະ ຫຍາມ. ແຕ່ຕົກມາຮອດ ລັດຊະການ ເຈົ້າຊີວິດ ອະຊິຣາວຸດ ລາຊະການທີ 6 (ລູກຊາຍຂອງຈຸລາລົງກອນ ) ບັນຫາແລະຄວາມກົວຢ້ານແບບນັ້ນຈຶ່ງຖືກແກ້ຕົກໄປ.

ເຈົ້າຊີວິດ ອະຊິຣາວຸດ(1910-1925) ເປັນຜູ້ນຶ່ງໃນບັນດາຄົນຮຸ່ນໃຫມ່- ທີ່ໄດ້ຮັບການສຶກສາມາຈາກ ຕ່າງປະເທດ ຄື ຈາກມະຫາວິທະຍາໄລອອກສ໌ຟອດ ປະເທດອັງກິດ ແລະໄດ້ຍຶດຖືຊື່ສັດຕໍ່ແນວຄຶດຄຽວຄືກັບ ຜູ້ອື່ນໆໃນຮຸ່ນດຽວກັບພະອົງ. ຍິ່ງກວ່າຜູ້ອື່ນໃດ ພະອົງໄດ້ເຮັດໃຫ້ຄວາມຮູ້ສຶກຊາດນິຍົມກາຍເປັນສ່ວນນຶ່ງ ໃນຄວາມນຶກຄຶດຂອງຊາວ ສະຫຍາມ ຜູ້ມີການສຶກສາທຸກຄົນ. ໃນຖານະທີ່ເປັນທັງນັກປະພັນ ນັກແຕ່ງບົດ ລະຄອນ ແລະນັກສະແດງ ພະອົງຊົງສົ່ງເສີມແນວຄວາມຄຶດເຫລ່ານັ້ນອອກສູ່ເວທີສະແດງ ແລະ ຜ່ານໜັງ ສືພິມຂອງລັດ ດ້ວຍການຂຽນເລື່ອງຕ່າງໆ ຫລາຍກວ່າ 200 ເລື່ອງ ເລີ່ມຕົ້ງແຕ່ ການແປເລື່ອງຂອງ ເຊຊ໌ເປຽຣ໌ ແລະ ໂມລິແອຣ໌ (Shakespeare & Moliere) ແລະຂຽນຕິຕຽນ ຢ່າງແຫລມຄົມ ປະຫວັດ ສາດອັນປຸ່ງແຕ່ງແລ້ວຂອງສະຫຍາມ ຈົນເຖິງບົດຄວາມທາງການເມືອງ "ເສລີພາບ ແຫ່ງ ທ້ອງທະເລ" ທີ່ເລັ່ງໃສ່ຕໍ່ຕ້ານຄົນຈີນ "ຄົນຍີວ ແຫ່ງ ຕາເວັນອອກ" ຫລື ປະເທດເຢຽລະມັນ ໃນລະຫວ່າງການເກີດ ສົງຄາມໂລກ ຄັ້ງທີ 1. ໂດຍອາໄສ ອົງການຈັດຕັ້ງຕ່າງໆ ພະອົງໄດ້ກໍ່ຕັ້ງ ແລະ ເປັນຜູ້ນຳພາອົງການ ເຫລ່ານັ້ນ ເຊັ່ນ ກອງທະຫານເສືອປ່າ (ຂະບວນຂອງຄົນໄວກາງຄູ່ກັບທະຫານ), ພວກລູກເສືອ, ສະໂມສອນ ລາຊະບາວີ ແລະກຸ່ມນັກສະແດງລະຄອນ ກັບ ນັກວັນນະກຳ ຂອງພະອົງ. ພະເຈົ້າຊີວິດຊົງ ເປັນອົງອຸປະຖຳ ປົກປ້ອງລັດທິຊາດນິຍົມ ຜ່ານວັດທະນະທຳ ຜູ້ດີເດັ່ນຂອງຊາດ ໂດຍການເປັນນັກໂຄສະນາ ປຸກລະດົມ ຢ່າງມີປະສິດທິຜົນຂອງພະອົງ ແລະດ້ວຍການກໍ່ຕັ້ງອົງການຈັດຕັ້ງທາງສັງຄົມການເມືອງ ທີ່ມີຄວາມ ສຳຄັນຍືນຍາວ.

ຢ່າງໃດກໍດີ, ເຈົ້າຊີວິດວັດຊິຣາວຸດ (ລັດຊະການທີ 6) ຊ້ຳເປັນນັກການເມືອງຜູ້ຂີ້ຮ້າຍສຸດ. ໂດຍ ພະຍາຍາມດິ້ນອອກຈາກການຄອບງຳຂອງຄົນຮຸ່ນພະລາຊະບິດາຂອງພະອົງ, ໃນປີ 1915 ພະອົງໄດ້ປົດ ພວກເສນາບໍດີ ທີ່ສືບທອດມາແຕ່ສະໄຫມ ເຈົ້າຊີວິດຈຸລາລົງກອນ ອອກທັງຫມົດ ຍົກເວັ້ນຜູ້ດຽວ ແລ້ວ ແຕ່ງຕັ້ງເອົາຜູ້ມາຫ້ອມລ້ອມພະອົງ ດ້ວຍການຕັ້ງລັດຖະບານ ທີ່ລ້ວນແຕ່ແມ່ນຄົນ ທີ່ພະອົງໄວ້ເນື້ອເຊື່ອໃຈ ສ່ວນຫລາຍມາຈາກຄອບຄົວສາມັນຊົນ ແລະຫລາຍຄົນແມ່ນຄົນຫນຸ່ມທີ່ໄດ້ຮັບການສຶກສາມາຈາກຕ່າງປະ ເທດ. ພັນທະມິດ ແລະຜູ້ທີ່ພະອົງຮັກຫອມເປັນການສ່ວນຕົວ ຫລາຍຄົນ ເປັນຜູ້ທີ່ພະອົງເລືອກເຂົ້າມາ ແລະຍ້ອນການຂາດຄວາມສົນໃຈດ້ານການບໍລິຫານຂອງພະອົງ ຈຶ່ງເຮັດ ໃຫ້ຜູ້ຄົນເຫລ່ານີ້ຢູ່ນອກເໜືອພະ ບັນຊາຄວບຄຸມໂດຍກົງຂອງພະອົງ. ດັ່ງນັ້ນພະອົງຈຶ່ງເຮັດໃຫ້ຫລາຍຄົນແຕກອອກຈາກຖັນແຖວໄປ. ກອງ ທະຫານເສືອປ່າໂດຍສະເພາະ ເຊິ່ງໃນຕົວຈິງເປັນກອງທະຫານ ສ່ວນຕົວຂອງເຈົ້າຊີວິດ ແລະ ກອງທະ ຫານນີ້ກໍຕໍ່ຕ້ານເປັນສັດຕູກັບກອງທັບແຫ່ງຊາດ ແລະອີກຫລາຍໆ ກໍ່ມຢ່າງຈິງຈັງ.

ປະຕິກິລິຍາຕໍ່ຕ້ານ ເຈົ້າຊີວິດ ອະຊິຣະວຸດ ຄັ້ງທຳອິດ ເກີດຂຶ້ນໃນປີ 1912 ເມື່ອກຸ່ມນາຍທະຫານຊັ້ນ ຫນຸ່ມນ້ອຍອາຍຸປະມານຊາວປາຍ ໄດ້ພາກັນວາງແຜນເຮັດລັດຖະປະຫານຕໍ່ຕ້ານເຈົ້າຊີວິດ. ພວກເຂົາອ້າງ ວ່າ ເປັນການຕໍ່ຕ້ານການບໍລິຫານແບບທັນສະໄຫມທີ່ບໍ່ສົມບູນແບບ, ຕໍ່ຕ້ານທຸລະກິດໃນຊົນນະບົດທີ່ບໍ່ທັນ ແລ້ວຮຽບຮ້ອຍ, ຕໍ່ຕ້ານລະດັບຄວາມສຳພັນ ແບບສ່ວນຕົວ ທີ່ຍັງຄົງຄອບງຳວຽກງານການປົກຄອງ ແລະ ຕໍ່ຕ້ານສິນລະທຳອັນຕົກຕ່ຳທີ່ເຫັນໄດ້ຢ່າງຈະແຈ້ງຂອງບັນດາຂ້າລາຊະການ. ແນວຄວາມຄຶດຂອງ ພວກເຂົາສ່ວນນຶ່ງກໍ່ຮ່າງສ້າງຕົວຂຶ້ນຈາກສົງຄາມລະຫວ່າງ ຣັດເຊຽ - ຍີ່ປຸ່ນ ປີ1905 ແລະ ຕໍ່ມາດ້ວຍ ການປະຕິວັດຂອງຈີນ ປີ 1911, ຈາກເຫດການເຫລ່ານີ້ພວກນາຍທະຫານເຫລ່ານັ້ນ ເກີດມີຄວາມຮູ້ສຶກ ກ່ຽວກັບເອກະລັດ ແຫ່ງຊາດຂອງພວກເຂົາ ແລະຄວາມຮູ້ສຶກອັບອາຍເມື່ອປຽບທຽບປະເທດຊາດຂອງ ພວກເຂົາ ໃສ່ກັບສິ່ງທີ່ພວກເຂົາໄດ້ຮູ ກ່ຽວກັບປະເທດກ້າວໜ້າກວ່າ ໃນອາຊີ ແລະ ຕາເວັນຕົກ. ເມື່ອໄດ້ ໂຄ່ນລົ້ມຕຳແໜ່ງ ນາຍທະຫານໃນເຂດ ກຽເທບ ແລະ ໃນຊົນນະບົດຢ່າງມີດໆ ແລ້ວ ພວກເຂົາຈຶ່ງໄດ້ວາງ ແຜນລົງມືເຮັດລັດຖະປະຫານ ໃນມື້ພິທີຖືນ້ຳສາບານໃນເດືອນ ເມສາ ປີ1912. ເຖິງຢ່າງໃດກໍດີ ການເຄື່ອນ

ໄຫວຂອງພວກເຂົາກໍຖືກເປີດເຜີຍໃນເດືອນກຸມພາ ແລະ ມີຄົນເກົ້າສິບເອັດຄົນຖືກຈັບເຂົ້າຄຸກຕ້ອງໂທດແຕ່ສິບສອງປີ ເຖິງ ຕະຫລອດຊີວິດ.

ເກືອບມີລັດຖະປະຫານອີກຄັ້ງນຶ່ງ ໂດຍທະຫານ ຕອນກາງປີ 1917, ແຕ່ມີການຈັບກຸມຄັ້ງໃຫຍ່ຢູ່ໃນກອງທັບ ໃນເວລາດຽວກັບທີ່ສະຫຍາມເຂົ້າຮ່ວມສົງຄາມໂລກ ຄັ້ງທີ 2 ໂດຍເປັນຝ່າຍ ສຳພັນທະມິດ ແຕ່ເຫດການເຫລົ່ານັ້ນ ພຽງແຕ່ເປັນການສ່ອງແສງເຖິງເລື່ອງການເມືອງ ໃນວົງການທະຫານ ຫລາຍກວ່າ. ບໍ່ວ່າຈະເປັນກໍລະນີໃດໆ ເມື່ອໄດ້ເຂົ້າຮ່ວມໃນສົງຄາມ ໂລກຄັ້ງທີ 1 ແລ້ວ ລາຊະອານາຈັກ ສະຫຍາມ ກໍໄດ້ຮັບສຽງສະໜັບສະໜຸນທາງການທູດ ຢ່າງພຽງພໍ ຢູ່ໃນກອງປະຊຸມທີ່ ແວຣ໌ຊາຍ (Versailles) ເພື່ອຍົກເລີກຂໍ້ຕົກລົງອັນບໍ່ເປັນທຳ ກ່ຽວກັບດິນແດນນອກ ອານາເຂດບາງຂໍ້.

ເຈົ້າຊີວິດ ວະຊິຣະວຸດ ສະຫວັນນະຄົດໃນປີ 1925 ໂດຍບໍ່ມີລັດຊະທາຍາດ, ພະອະນຸຊາ ຂອງ ພະອົງ ຄື ເຈົ້າປະຊາທິປົກ (1925-1935) ຜູ້ເຊິ່ງບໍ່ເຄີຍຄາດຫວັງມາກ່ອນວ່າຈະໄດ້ເປັນກະສັດ ແລະບໍ່ໄດ້ກະກຽມພະອົງສຳລັບຮັບພາລະໜ້າທີ່ໃຫມ່ອັນນີ້ ທັງໆທີ່ພະອົງຊົງມີຄວາມຮູ້ສຶກກ່ຽວກັບເສລີພາບ ແລະ ປະຊາທິປະໄຕຢ່າງຮຸນແຮງ ແຕ່ພະອົງກໍບໍ່ໄດ້ມີອຳນາດສ່ວນພະອົງ ຫລື ອຳນາດທາງການເມືອງ ເພື່ອ ເຮັດໃຫ້ຄວາມຄຶດເຫລົ່ານັ້ນເກີດເປັນຈິງຂຶ້ນມາໄດ້. ລັດຖະບານຂອງພະອົງ ຈຶ່ງເປັນລັດຖະບານ ຂອງຮຸ່ນຄົນ ສະໄໝ ຂອງເຈົ້າຊີວິດ ຈຸລາລົງກອນ ແລະບັນດາຄອບຄົວເຊື້ອພະວົງ ກໍພ້ໃຈທີ່ຈະກັບຄືນມາສະເໜີຍອຳ ນາດ ໂດຍຂັບໄລ່ພວກຄົນໜຸ່ມທີ່ບໍ່ເປັນເຊື້ອເຈົ້າ ເຊິ່ງ ເຈົ້າວະຊະຣາວຸດ ສະໜັບສະໜຸນ. ເຈົ້າຊີວິດປະຊາ ທິປົກ ບໍ່ຄືກັບພະເຊດຖາຂອງພະອົງ ຄື ພະອົງຊົງຊົມໃຊ້ສະພາທີ່ເປີກສາເປັນປະຈຳ ທີ່ ປະກອບດ້ວຍ ພະບໍລົມມະວົງສານຸວົງ ແລະຂ້າລາຊະການຊັ້ນຜູ້ໃຫຽ ແຕ່ກໍປາກົດຈະແຈ້ງ ວ່າ ພະອົງຊົງພະຍາຍາມ ຢ່າງຈິງຈັງ ເພື່ອຫຍັບຍ້າຍຜູ້ຄົນເຫລົ່ານີ້ ເຂົ້າໄປຢູ່ສະພາຜູ້ແທນລາສະດອນ ຫລາຍຂຶ້ນໆ. ພະອົງຖືກ ຂັດຂວາງໂດຍຍາດພີ່ນ້ອງຄື ບັນດາພວກ ເຈົ້າລຸງຜູ້ອາວຸໂສ ແຕ່ກໍບໍ່ຫຍຸ້ງຍາກພໍປະມານຍ້ອນຄວາມຮຽກ ຮ້ອງຂອງມະຫາຊົນທີ່ຢາກມີລັດຖະບານເປັນຕົວແທນ ຍັງບໍ່ເຂັ້ມຂຸ້ນຮຸນແຮງເທົ່າໃດ.

ຢ່າງໃດກໍດີ, ຄວາມຮຽກຮ້ອງຕ້ອງການເພື່ອປ່ຽນແປງ ທາງການເມືອງມີຢູ່ແລ້ວ ເຖິງວ່າບໍ່ໄດ້ມີ ຊ່ອງທາງກຳນົດໄວ້ຢ່າງຄັກແນ່ເພື່ອສະແດງອອກກໍຕາມ. ຕະຫລອດລະຍະ ສີ່ສິບປີທີ່ຜ່ານມາລາຊະອານາ ຈັກ ສະຫຍາມ ໄດ້ສ້າງຊົນຊັ້ນສູງຊຸດໃຫມ່ ທີ່ເປັນນັກການປົກຄອງພົນລະເຮືອນ, ນັກວິຊາການ ແລະທະ ຫານ. ໃນຊ່ວລະຍະນຶ່ງ ການເລື່ອນຊັ້ນໃນສັງຄົມແລະໃນວົງການລັດຖະບານ ຂອງບຸກຄົນເຫລົ່ານັ້ນດຳເນີນ ສືບຕໍ່ມາແລະເປັນທີ່ພໍໃຈ ແຕ່ກໍຖືກກວດກາແລະເຖິງຂັ້ນປັ້ນຄືນໃນສະໄໝ ເຈົ້າຊີວິດ ປະຊາທິປົກເມື່ອພະ ບໍລົມມະວົງສານຸວົງທັງຫລາຍໄດ້ກັບຄືນມາສູ່ຕຳແໜ່ງສູງໃນວົງລາຊະການ ແລະເມື່ອມີການຍັບຍັ້ງການ ຂຶ້ນເງິນເດືອນ ໃນລະຍະປິດຂ້າລາຊະການອອກ ເພື່ອປະຢັດງົບປະມານ ໃນປາຍຊຸມປີ 1920.

ການຕົກຕ່ຳ ຂອງເສດຖະກິດໂລກ ເຮັດໃຫ້ຄວາມຄຶດທີ່ເຄີຍມີນັ້ນ ອ່ອນຍວບລົງ ແລ້ວຕໍ່ມາ ກ້ຽວ ມິດໄປ ໃນວາລະການກໍ່ຂະບົດທີ່ປະລາໄຊໃນປີ 1912. ພວກຫົວຮຸນແຮງຈຳນວນນ້ອຍນຶ່ງໄດ້ ກະກຽມກັນໄວ້ ຢ່າງມິດໆເມື່ອຫລາຍປີກ່ອນ ເລີ່ມດ້ວຍການປະຊຸມປຶກສາຫາລືກັນ ຂະນະທີ່ພວກເຂົາຮ່ຳຮຽນຢູ່ເອີຣົບ. ນ້ຳໜັກຂອງຝ່າຍລາຊາທິປະໄຕ ສະໄໝ ພະປະຊາທິປົກ ກັບການປົດຂ້າລາຊະການ ບວກເຂົ້າກັນ ເຮັດ ໃຫ້ມີການຕອບຮັບເອົາແນວຄວາມຄຶດກ່ຽວກັບການປະຕິວັດ ຕ້ານລະບອບສົມບູນ ລະບາຍາສິດທິລາດ ຫລາຍຂຶ້ນກວ່າເກົ່າ ເຊັ່ນ ພວກນາຍທະຫານໜຸ່ມທີ່ບໍ່ໄດ້ຮັບການເລື່ອນຊັ້ນ, ພວກນັກສຶກສາ ທີ່ຮຽນ ສຳເລັດຈາກຕ່າງປະເທດ ຫາວຽກເຮັດບໍ່ໄດ້ຕາມຄາດຫວັງ ແລະ ພວກຜູ້ເຖົ້າຜູ້ແກ່ກໍເລີ່ມບໍ່ແນ່ ໃຈໃນກຽດ ສັກສີ ແລະຄວາມເອື້ອເຟື້ອໃຈກວ້າງຂອງລະບອບລາຊາທິປະໄຕ. ພວກຫົວຮຸນແຮງອ່ອນໜຸ່ມ ກັບພວກ ຫົວປານກາງອາວຸໂສ ສົມທົບກັນວາງແຜນ ແລະລົງມືເຮັດການ ປະຕິວັດນອງເລືອດໃນປີ 1932.

ຫລັງຈາກລົດຖັງເຄື່ອນອອກສູ່ຖະໜົນໃນວັນທີ 24 ມິຖຸນາ 1932 ແລະຫລັງຈາກທີ່ລັດຖະບານ ຖືກໂຄ່ນລົ້ມ ໂດຍພວກກໍ່ການທ້າທາຍ ທີ່ເອີ້ນຕົນເອງວ່າ "ພັກລາສະດອນ" ແລ້ວ ພັກໄດ້ສົ່ງຈົດໝາຍ ສະບັບນຶ່ງເຖິງພະເຈົ້າຊີວິດ ສະເໜີແນວຄຶດການເມືອງ ໂດຍຮຽກຮ້ອງໃຫ້ພະອົງ ຍອມຢູ່ໃຕ້ກົດໝາຍລັດ ຖະທຳມະນູນ ແລະອີກສະບັບໜຶ່ງຂຽນເຖິງປະຊາຊົນທົ່ວໄປ ໂດຍອະທິບາຍເຫດຜົນພຶດຕິກຳຂອງພວກ ຕົນ. ທັງສອງສະບັບຂຽນດ້ວຍສຳນວນຄຳເວົ້າຮຸນແຮງ ປະນາມລະບອບສົມບູນລະນາຍາສິດທິລາດ ແລະ ການປົກຄອງຜ່ານມາ ແລະປະກາດເຈດຕະນາລົມຂອງພັກ ຕໍ່ການປົກຄອງປະເທດເພື່ອຄວາມຜາສຸກ ຂອງປະຊາຊົນ. ບໍ່ດົນ ແນວຄຶດແບບຮຸນແຮງ ຂອງຝ່າຍສະໜັບສະໜູນ ສາທາລະນະລັດ ເຊິ່ງພວກ ສະມາຊິກພົນລະເຮືອນຂອງກຸ່ມ ກໍອ່ອນແຮງລົງ ດັ່ງນັ້ນ ຫົວໜ້າກຸ່ມຈຶ່ງສາມາດຊັກນຳເອົາຂ້າລາຊະ ການພົນລະເຮືອນອາວຸໂສແຕ່ລະບອບເກົ່າ ຜູ້ເຫັນດີເຫັນງາມນຳພາລະກິດຂອງພວກເຂົາ ເພື່ອເຂົ້າມາເປັນ ຫົວໜ້າ ຄະນະລັດຖະບານຊົ່ວຄາວຊຸດໃໝ, ທັງນີ້ເປັນການຫລຸດຜ່ອນ ໂອກາດທີ່ຈະເກີດຄວາມຂັດແຍ່ງ ໃນທັນທີນັ້ນໄປ. ເຖິງແນວໃດກໍດີ ການຊັ່ງຊາອຳນາດກໍຍັງຄົງຢູ່ໃນມື ຂອງ ພັກລາສະດອນ ເມື່ອປະກາດໃຊ້ ລັດຖະທຳມະນູນໃນເດືອນທັນວາ1932. ປີກພົນລະເຮືອນຫົວ ຮຸນແຮງຂອງພັກ ເຊິ່ງມີຫົວໜ້າເປັນອາຈານ ສອນກົດໝາຍຢູ່ມະຫາວິທະຍາໄລຄື ຫລວງປະດິດ ມະນູທຳ (ປຣີດີ ພະນົມຍົງ) ໄດ້ພະຍາຍາມຢູ່ລະ ຍະສັ້ນໆ ເພື່ອດຳເນີນອຸດົມການອັນທຳອິດຂອງການລັດຖະປະຫານ ເຂົ້າໃນແຜນເສດຖະກິດ ສະບັບເດືອນ ມິນາ 1932 ແຕ່ ເຈົ້າຊີວິດກັບພວກຂຸນນາງ ຫົວຮີດເດີມ ທີ່ຍັງສືບຕໍ່ຢູ່ໃນວົງການລັດຖະບານ ໄດ້ເຄື່ອນ ໄຫວຕໍ່ຕ້ານພວກເຂົາ ບັງຄັບໃຫ້ ປຣີດີ ລາອອກຈາກຕຳແໜ່ງແລະລະງັບສຽງຂອງຝ່າຍຫົວຮຸນແຮງ. ບໍ່ເທົ່າໃດເດືອນຕໍ່ມາ ໃນ ເດືອນມິຖຸນາ ພວກທະຫານໄດ້ເຮັດລັດຖະປະຫານອີກເທື່ອນຶ່ງ ເພື່ອຕັ້ງຄົນຂອງ ພວກເຂົາເປັນນາຍົກລັດຖະມຸນຕີ ຄື ພະຍາພະຫົນພົນ ພະຍຸຫະເສນາ (ພົດ ພະຫົນໂຍທິນ). ເມື່ອການ ລັດຖະປະຫານຕອບໂຕ້ຂອງຝ່າຍ ລາຊາທິປະໄຕ ນຳພາໂດຍ ພະອົງເຈົ້າບໍ່ວອນເດດ ປະລາໄຊ ໃນເດືອນ ຕຸລາ ກຸ່ມທະຫານຈຶ່ງໄດ້ເປັນຝ່າຍ ຄວບຄຸມແຕ່ພຽງຜູ້ດຽວໂດຍຈັດການປາບປາມສັດຕູທັງຫມົດຢ່າງຮາບ ຄາບບໍ່ວ່າປີກຊ້າຍ ປີກຂວາ ເຊັ່ນ ປຣີດີ ຜູ້ນຳຝ່າຍພົນລະເຮືອນຫົວຮຸນແຮງ ພວກພົນລະເຮືອນຫົວຮີດ ເດີມທີ່ຕົກທອດມາແຕ່ລະບອບເກົ່າ ກ່ອນການປະຕິວັດ ຮວມທັງພວກລາຊາຍິຍົມ. ໄຊຊະນະຂອງພວກທະ ຫານປະຕິວັດຍິ່ງໜັກແໜ້ນຂຶ້ນອີກ ເມື່ອພະເຈົ້າປະຊາທິປົກ ສະຫລະລາຊະບັນລັງໃນປີ 1935 ແລະ ດ້ວຍການຂຶ້ນຄອງລາດຕໍ່ມາຂອງກະສັດອົງເຍົາໄວ ຄື ເຈົ້າຊາຍອະນັນທະມະຫິດົນ ທີ່ຍັງຊົງສຶກສາຢູ່ປະ ເທດ ສະວິດສ໌.

ລະບອບ ການປົກຄອງພາຍໃຕ້ລັດຖະທຳມະນູນ ທີ່ເລີ່ມນຳເຂົ້າມາໃຊ້ໃນເວລານັ້ນຍັງບໍ່ຖືວ່າ ເປັນ ຄວາມກ້າວໜ້າທີ່ຍິ່ງໃຫຍ່ເທື່ອສຳລັບຍຸກກ່ອນ ໃນຄວາມໝາຍຂອງປະຊາທິປະໄຕ. ອຳນາດຍັງຄົງຢູ່ ໃນກຳມືຂອງຄົນໜຍິບມືດຽວ ຄືສະມາຊິກຂອງພັກລາສະດອນ ຜູ້ເຊິ່ງໃນຂັ້ນຕອນແຮກຕົ້ນຂອງການພັດທະ ນາລັດຖະທຳມະນູນນັ້ນ ໄດ້ຮັກສາອຳນາດສູງສຸດຂອງຕົນໄວ້ ດ້ວຍການຜູກຂາດຕັ່ງນັ່ງໃນ ສະພາ ແລະໃນ ກະຊວງຕ່າງໆ ເຖິງວ່າໄດ້ຄາດຄະເນກັນວ່າ ຜູ້ຖືກແຕ່ງຕັ້ງນັ້ນ ຈະຄ່ອຍໆຖືກປ່ຽນແທນໂດຍຜູ້ແທນທີ່ເລືອກ ຕັ້ງເຂົ້າມາ ເມື່ອໃດຫາກລະດັບການສຶກສາຂອງປະຊາຊົນອະນຸຍາດໃຫ້ເປັນໄປ ຫລື ເມື່ອອີກສິບປີຜ່ານໄປ. ການເລືອກຕັ້ງທາງອ້ອມເມື່ອປີ1933 ແລະ1937 ເຮັດໃຫ້ລັດຖະສະພາມີສະມາຊິກເລືອກຕັ້ງເຂົ້າມາຫລາຍ ກວ່າເຄິ່ງນຶ່ງ ອັນໄດ້ບີບໃຫ້ລັດຖະບານຕ້ອງປະຕິບັດໃຫ້ສຳເລັດໂຄງການເສລີພາບຂອງຕົນ ແລະເພື່ອຮັກສາ ແນວຄຶດປະຊາທິປະໄຕ ທີ່ປະກາດອອກໄປແລ້ວ. ເຖິງວ່າ ຈະຂາດ ງົບປະມານສະໜັບສະໜຸນໃນເວລານັ້ນ ລັດຖະບານກໍຍັງສາມາດເຮັດຫລາຍສິ່ງແນວທີ່ກ້າວໜ້າ ໃນວຽກງານດ້ານສັງຄົມສົງເຄາະ ໂດຍສະເພາະ ຍົງເຂດວຽກງານການສຶກສາ ແລະ ສາທາລະນະສຸກ ແລະ ອັນທີ່ເຮັດໄດ້ຫນ້ອຍກວ່າໝູ່ແມ່ນດ້ານເສດຖະ ກິດ. ໃນທີ່ສຸດ ການສຶກສາພາກບັງຄັບລະດັບປະຖົມ ໄດ້ຂະຫຍາຍຕົວອອກຢ່າງທົ່ວເຖິງພາຍໃນລາຊະ ອານາຈັກ. ລັດຖະບານມີຄວາມຕື່ນຕົວເປັນພິເສດ ຕໍ່ຜົນສະທ້ອນຂອງນະໂຍບາຍການເກັບພາສີຂອງຕົນ

ໃນຂັ້ນບ້ານ, ຈຶ່ງໄດ້ພະຍາຍາມຫລຸດຜ່ອນພາສີລົງ ເມື່ອໃດເງື່ອນໄຂທາງເສດຖະກິດຍັງຕ່ຳຕ້ອຍ. ຜົນຕອບແທນສຳລັບແຜນການເຫລົ່ານີ້ ແມ່ນການ ສະໜັບສະໜຸນຂອງສະມາຊິກເລືອກຕັ້ງ ເພື່ອໃຫ້ໄດ້ຮັບງົບປະມານ ສຳລັບການທະຫານສືບຕໍ່ໄປ ໂດຍທີ່ພວກທະຫານໄດ້ອ້າງເຫດຜົນອັນທຳອິດວ່າ ແມ່ນເພື່ອປ້ອງກັນການ ຄຸກຄາມພາຍໃນ ແລະ ອັນສຸດທ້າຍແມ່ນຄວາມໄຝ່ຝັນ ປົນກັບຄວາມຢ້ານ. ນັບແຕ່ກາງປີ 1933 ເຖິງປາຍປີ 1938 ພະຍາພະຫົນ ໃນຖານະນາຍົກລັດຖະມຸນຕີ ໄດ້ນຳພາລັດຖະບານໄປຕາມແນວທາງທີ່ຕາມມາດຕະຖານສະໜາມແລ້ວ ແມ່ນແນວທາງລະດັບກາງ ແຕ່ແນ່ນອນວ່າມີລັກສະນະ ກ້າວໜ້າ. ໃນທີ່ສຸດ ລັດຖະບານຂອງພະຍາພະຫົນກໍຕົກຈາກອຳນາດເມື່ອເດືອນທັນວາ1938 ເມື່ອເກີດມີ ການໂຕ້ຖຽງຊັກຖາມຢ່າງເຂັ້ມຂຸ້ນໃນເລື່ອງງົບປະມານ ຈາກສະມາຊິກລັດຖະສະພາທີ່ເລືອກຕັ້ງເຂົ້າມາ ເປັນເຫດໃຫ້ມີການລົງຄະແນນສຽງບໍ່ໄວ້ວາງໃຈລັດຖະບານ, ຫລວງພິບູນສົງຄາມ ນາຍທະຫານຊັ້ນ ພັນເອກຜູ້ມີຊື່ສຽງໃນກອງທັບ ຍ້ອນເປັນຜູ້ສະໜັບສະໜຸນ ໃຫ້ມີການລົງຄະແນນສຽງບໍ່ໄວ້ວາງໃຈ ແລະ ເປັນຜູ້ມີບົດບາດກ້ວາງຂວາງ ໃນການທຳລາຍກອງກຳລັງຂອງຝ່າຍນິຍົມລາຊາທິປະໄຕເມື່ອປີ 1933 ໄດ້ຂຶ້ນກຳ ອຳນາດ. ບໍ່ພຽງແຕ່ຢູ່ໃນສະໜາມ ເທົ່ານັ້ນ ເຂົາເປັນຜູ້ປົກປ້ອງເຜີຍແຜ່ຢ່າງແຂງຂັນລັດທິຊາດນິຍົມໄທ ແລະການເລືອກເອົາກຸ່ມກຳອຳນາດແບບມີຕັກກະສາດ.

ລັດຖະບານຊຸດທຳອິດຂອງ ຫລວງພິບູນສົງຄາມ (1938-1944) ເປັນທີ່ພໍເຂົ້າໃຈໄດ້ໃນດ້ານຫລັກການຂອງສະພາບແວດລ້ອມຂອງໂລກເຊິ່ງລັດຖະບານໄດ້ສ້າງຕັ້ງຂຶ້ນ. ໃນຂະນະທີ່ກຽດສັກສີຂອງພວກປະຊາທິປະໄຕຕາເວັນຕົກ ພວມຕົກຕ່ຳ ແລະ ເມື່ອສະມັດຖະພາບຂອງແນວຄວາມຄຶດ ກັບຄ່ານິຍົມແບບຕາເວັນຕົກເພື່ອແກ້ໄຂບັນຫາວິກິດການອັນຮຸນແຮງຂອງເສດຖະກິດ ແລະ ເພື່ອໃຫ້ຢູ່ລອດຖ້າມກາງຄວາມຂັດແຍ່ງລະຫວ່າງຊາດນັ້ນ ກໍຄືວ່າກະຈາຍອອກແລ້ວ, ສະແດງລິດອອກ ແລະມີລັກສະນະຊາດນິຍົມສຸດຂີດ ແລະລັດຕ່າງໆທີ່ມີອຳນາດທາງການທະຫານເຊັ່ນ ຍີ່ປຸ່ນ ກໍເປັນທີ່ດຶງດູດໃຈຂອງຊາວສະໜາມ. ດັ່ງນັ້ນ ການເມືອງສະໜາມ ຈຶ່ງຫັກລ້ຽວໄປທາງຂວາດ້ວຍການເຊີດຊູ້ຍ້ອງຍໍກອງທັບຂຶ້ນຢ່າງເປີດເຜີນ, ເນັ້ນຍ້ຳຄ່ານິຍົມແບບຊາດນິຍົມ ແລະໂຈມຕີວັດທະນະທຳຕາເວັນຕົກ ຢ່າງຮຸນແຮງ, ລັດທິຈັກກະພັດນິຍົມ ຕາເວັນຕົກ, ບົດບາດຂອງຊາວຈີນໃນເສດຖະກິດສະໜາມ ແລະຕຳນິຕິຕຽນແມ່ນແຕ່ກະໂຕລະບອບການເມືອງຕົນເອງ. ສະໜາມພຽນປູກຝັງສາຍສຳພັນ ຢ່າງລະແວດລະວັງກັບລັດຖະບານ ຍີ່ປຸ່ນ ໂດຍສ້າງຕັ້ງສາຍຜູກພັນທາງເສດຖະກິດ ແລະການເມືອງ ຢ່າງເຂັ້ມແຂງ. ເມື່ອຝຣັ່ງ ເປັນຝ່າຍພ່າຍແພ້ ເຢັຽລະມັນ ໃນສົງຄາມ ເມື່ອເດືອນມິຖຸນາ 1940 ຈອມພົນ ປ. ພິບູນສົງຄາມ ກໍຍິ່ງທະວີແຮງກົດດັນໃສ່ ອິນໂດຈີນຝຣັ່ງຫລາຍຂຶ້ນ ດ້ວຍການຮຽກຮ້ອງສິດທິເໜືອດິນແດນ, ສົມທົບໃສ່ກັບຂະບວນການທົ່ວໄປ ກຽວກັບການເຜີຍແຜ່ແນວຄຶດໄທໃຫຍ່ ທີ່ສະແດງອອກໃຫ້ເຫັນຢ່າງຄັກທີ່ສຸດ ດ້ວຍການປ່ຽນຊື່ລາຊະອານາຈັກມາເປັນປະເທດໄທ. ເຫດການນີ້ໄດ້ພາໄປເຖິງການລະເບີດສົງຄາມ ຢ່າງເຕັມຂະໜາດ ກັບ ຝຣັ່ງໃນປີ 1940 - 1941. ສົງຄາມນີ້ ໂດ່ງດັງຫລາຍ ໃນສະໜາມ ແຕ່ກໍຍຸຕິລົງດ້ວຍການໄກ່ເກ່ຽຂອງຍີ່ປຸ່ນ ແລະ ດ້ວຍການຍົກດິນແດນບາງສ່ວນ ກ້ຳຕາເວັນຕົກ ຂອງກຳພູຊາ ກັບດິນແດນບາງບ່ອນ ຂອງລາວໃຫ້ແກ່ສະໜາມ. ບໍ່ມີຫຍັງໜ້າສົງໄສວ່າ ລັດຖະບານພິບູນສົງຄາມເຂັ້ມແຂງແຮງກ້າຂຶ້ນຍ້ອນຜົນໄດ້ ຈາກການຮັດສົງຄາມ ແຕ່ກໍພົບວ່າ ຕົນເອງຕົກເປັນຜູ້ເພິ່ງພາຍີ່ປຸ່ນຫນັກຂຶ້ນຫລາຍກວ່າທີ່ຄາດຄຶດໄວ້ແຕ່ທຳອິດ. ບັດນີ້ ຂອບເຂດອັນຈຳກັດ ແຫ່ງອຳນາດທາງການທະຫານຂອງ ສະໜາມ ຈຶ່ງເປັນທີ່ຈະແຈ້ງ ທ່ຽງກັບຄວາມເປັນຈິງທີ່ວ່າ ອຳນາດຂອງ ຍີ່ປຸ່ນ ໄດ້ກວມກຸ້ມທົ່ວອາຊີຕາເວັນອອກສຽງໃຕ້ແລ້ວ. ເມື່ອວັນທີ 8 ທັນວາ ປີ 1941 ກອງທະຫານ ຍີ່ປຸ່ນ ໄດ້ຍົກພົນຂຶ້ນບົກແບບສາຍຟ້າແລບຢູ່ຫົກຈຸດຕາມຊາຍຝັ່ງທະເລ ຂອງ ກິ່ວດອນ ສະໜາມ ແລະຜ່ານເຂົ້າມາໃນປະເທດແຕ່ທາງ ກຳພູຊາ ແລ້ວເອົາເຮືອບິນລົງຈອດກາງເດິ່ນ ນ້ອຍໃກ້ໆ ບາງກອກ. ກອງທະຫານ ຍີ່ປຸ່ນ ໄດ້ປະເຊີນໜ້າກັບການ ຕ່ຕ້ານແບບກະທັນຫັນຂອງກອງທະຫານ ສະໜາມປະຈຳທ້ອງຖິ່ນ. ແຕ່ເມື່ອ ຫລວງພິບູນ ໄດ້ຮັບລາຍງານກ່ຽວກັບການຍົກພົນຂຶ້ນບົກ ກໍບໍ່ສາມາດ

ແນມເຫັນທາງອອກຢ່າງອື່ນ ນອກຈາກຍອມຈຳນົນ ແລະເຂົ້າກັບຍີ່ປຸ່ນ. ຢ່າງໃດກໍດີ ນອກຈາກນີ້ ເປົ້າ ໝາຍບາງຢ່າງຂອງ ສະຫຍາມ ກໍຍັງອາດໄດ້ຮັບການຕອບສະໜອງຢູ່ໃນຂະບວນການນີ້. ເຖິງແມ່ນວ່າ ຫລວງພິບູນ ໄດ້ຕັດສິນໃຈ ປະກາດສົງຄາມ ກັບອາເມລິກາ ແລະອັງກິດ ຕາມການເລັ່ງລັດຂອງຍີ່ປຸ່ນ ແຕ່ນັ້ນກໍບໍ່ໄດ້ຖືວ່າ ເປັນໜ້າທີ່ຂອງ ສະຫຍາມ: ມັນແມ່ນສົງຄາມ ລະຫວ່າງຍີ່ປຸ່ນ ກັບຊາດຕາເວັນຕົກ, ໃນການສູ້ຊົນກັນ ລະຫວ່າງຊ້າງໃຫຍ່ສອງໂຕດັ່ງນີ້ ມີດນ້ອຍ ຄື ສະຫຍາມ ຈຳຕ້ອງເອົາໂຕຫລົບໜີຈາກ ການຖືກຢຽບແປໃຫ້ຖ່ວງທັນ.

ຊື່ສຽງອັນເດັ່ນດັງຫລາຍຂຶ້ນຂອງກອງທັບໄທ ໃນສາຍຕາຂອງປະຊາຊົນທົ່ວໄປ ໃນບັ້ນຕົ້ນ ເກີດ ຈາກຄວາມເໜືອກວ່າຢ່າງດຽວ ໃນການຈັດຕັ້ງທາງການທະຫານ ທີ່ໄດ້ຊ່ວຍໃຫ້ກອງທັບຮັກສາຄວາມ ສຳພັນອັນເຂັ້ມແຂງຕາມລຳດັບຍົດຊັ້ນ ແລະ ດ້ານສ່ວນຕົວ (ນາຍ-ລູກຈ້າງ) ທັ້ງປູກຝັງຄ່ານິຍົມອັນ ໜຽວແໜ້ນ ແລະ ທັນສະໄໝ. ພວກນາຍທະຫານ ຮູ້ຈັກຈັດຕັ້ງກັນດີກວ່າພວກຄູແຂງອື່ນໆ, ພວກເຂົາ ມີໂອກາດປະເຊີນໜ້າກັບຕາເວັນຕົກໜ້ອຍກວ່າ ແລະເບິ່ງອີກຢ່າງນຶ່ງກໍຄືເປັນຄົນຫົວນິຍົມຮີດເດີມ ແລະ ນິຍົມພິທີການຫລາຍກວ່າໃນວິທີການເຮັດວຽກ. ພວກຜົນລະເຮືອນຜູ້ໄຮ້ການຈັດຕັ້ງ ເຖິງຂັ້ນລະດັບບໍ່ສາ ມາດປະຕິບັດໜ້າວຽກໄດ້ ຢ່າງໜັກແໜ້ນ ເປັນກຸ່ມກ້ອນເອກະພາບນຶ່ງ ແລະຂາດເຂີນທັງກຳລັງດ້ານ ກາຍຍະພາບນັ້ນ ກໍໜາຍມຸ່ງຢາກເຫັນການປ່ຽນແປງແບບເຖິງຖອງ. ພວກເຂົາມີຈຳນວນໜ້ອຍກວ່າ ແລະ ກະແຈກກະຈາຍຢູ່ໃນຕຳແໜ່ງເລັກໆນ້ອຍໆໃນສັງຄົມເມືອງຫລວງ, ໃນຂະນະທີ່ຝ່າຍທະຫານມີລະ ບຽບຈັດຕັ້ງຕາມຂັ້ນຍົດແບບດຽວ. ເມື່ອຮວມກັນແລ້ວທັງສອງອົງປະກອບ ຈຶ່ງກາຍເປັນຊົນຊັ້ນນຳພາທີ່ ໜຸ່ມນ້ອຍຂອງສັງຄົມ ສະຖານະພາບຂອງພວກເຂົາໄດ້ຖືກກຳນົດຢ່າງຈະແຈ້ງໃນສາຍຕາຂອງມະຫາຊົນ. ຊາວນາ ກັບ ຄົນໃນເມືອງຕ່າງກໍຄອງຄອຍໃຫ້ພວກເຂົາລົງມືແບບ "ຜູ້ຍິ່ງໃຫຍ" ການປົກຄອງ ແມ່ນໜ້າ ທີ່ຂອງພວກເຂົາ ບໍ່ແມ່ນຂອງປະຊາຊົນ ເມື່ອບຸກຄົນເຫລົ່ານີ້ ເລີ່ມປາກເວົ້າກັບຊາວນາໂດຍກົງດ້ວຍພາສາ ຄຳສັບແບບສະເໜີພາບຜ່ານວິທະຍຸໃຫມ່ ແລະ ໜັງສືພິມ, ສຳລັບບາງຄົນແລ້ວຕ້ອງໃຊ້ເວລາພໍສົມຄວນ ເພື່ອໃຫ້ກຳໄດ້ວ່າ ການຫລົ້ນການເມືອງໄດ້ຜັນປ່ຽນໄປແລ້ວແທ້ໆ ແລະ ບັດນີ້ ມັນກ່ຽວຂ້ອງກັບ "ຂອງພວກ ເຮົາ" ບໍ່ແມ່ນແຕ່ "ຂອງພວກເຂົາ" ເທົ່ານັ້ນ.

# ບົດທີ 30 ປະເທດ ມາເລເຊຍ

ເຖິງແມ່ນວ່າການຄວບຄຸມລັດໃນອາລັກຂາ ເຊິ່ງອັງກິດສ້າງຕັ້ງໄວ້ຢູ່ແຫລມມາລາຢູເນເກຣິ(negeri) ໄດ້ອີງໃສ່ພື້ນຖານຮູບແບບອັນຕົ້ນໆ ຂອງສຳພັນທະໄມຕີຂອງຝ່າຍປົກຄອງ ແລະ ໃນສາຍຕາຂອງຜູ້ປົກຄອງ ມາເລ ບາງຄົນຖືວ່າ ເປັນວິທີການໃຫ້ໄດ້ອຳນາດ ແລະການຊ່ອຍເຫລືອດ້ານຄວາມຮູ້ຢູ່ໃນການປົກຄອງ ອັນໃຫ້ຜົນປະໂຫຍດ ຢູ່ເໜືອດິນແດນຂອງພວກເຂົາ, ໃນບໍ່ດົນ ມັນກໍໄດ້ເຂົ້າກ່ຽວຂ້ອງໃນຜົນກະທົບອັນຍິ່ງໃຫຍ່ ກວ່ານັ້ນ ແລະໄດ້ນຳເອົາການປ່ຽນແປງຢ່າງເຖິງຖອງມາໃຫ້ແກ່ຊີວິດການເປັນຢູ່ຂອງລັດທັງຫລາຍ. ໂດຍສະ ເພາະແລ້ວ ເທິງຝັ່ງທະເລດ້ານຕາເວັນຕົກ ທີ່ມີສະຫະພັນທະລັດມາເລ ເປັນຜົ້ນຳແລະຢ່າງນີ້ໄດ້ເກີດມີການ ພັດທະນາໃນຂອບເຂດທີ່ກ້ວ້າງຂວ້າງຂອງການດຳເນີນທຸລະກິດ ແບບເອີຣົບ ແລະ ແບບຈີນ ກັບກິດຈະກຳ ເສດຖະກິດທາງການຂຸດຄົ້ນ ພ້ອມດ້ວຍການອົບພະຍົບ ຊາວຕ່າງດ້າວເຂົ້າມາຫລາຍຜິດປົກກະຕິ. ໃນສະຫະ ພັນທະນະລັດມາເລ ປະຊາຊົນ ຫລາຍຂຶ້ນ ຈາກ 218,000 ຄົນ ໃນປີ 1891 (ເປັນການຂຶ້ນສຳມະໂນຄົວ ຢ່າງສົມບູນຄັ້ງທຳອິດ) ມາເປັນ 1.7 ລ້ານຄົນ ໃນປີ 1931. ນັບແຕ່ປີ 1891 ມາພຸ້ນແລ້ວມັນເປັນຜົນຮັບຈາກ ການເຂົ້າມາຂອງ ຊາວຈີນ ຢ່າງທະວີຄູນໄວວາ (ມີຄົນອິນເດຽ ແຕ່ຫນ້ອຍນຶ່ງ) ໃນລະຫວ່າງສອງທົດສະວັດ ຜ່ານມາ ຊາວມາເລ ຮວມທັງພວກອົບພະຍົບເຊື້ອສາຍ ມາເລ ມາຈາກບ່ອນອື່ນໆ ໃນຫມູ່ເກາະດອນ ຕ່າງໆໂຮມກັນແລ້ວ ມີແຕ່ 53% ຂອງປະຊາກອນທັງຫມົດ. ມາຮອດປີ 1931 ມີພຽງ 34.7% ຂອງປະຊາ ກອນ ເປັນຄົນເຊື້ອສາຍມາເລ, ສ່ວນຄົນຈີນຫລາຍຂຶ້ນເປັນ 41.5 % ນອກຈາກນີ້ກໍມີຄົນອິນເດຽ ອີກ 22.2 % ເຖິງແມ່ນວ່າ ຜູ້ເກັບກຳສຳຫລວດສຳມະໂນຄົວ ໃນປີ 1931 ຢືນຢັນວ່າ ຄົນຈີນເກືອບທັງຫມົດເປັນພວກທີ່ບໍ່ ໄດ້ຢູ່ຢ່າງຖາວອນ ເຊິ່ງກໍອາດແມ່ນຄວາມຈິງຕາມນັ້ນ ແຕ່ກໍໄດ້ມີຄົນຈີນທີ່ຕົກຄ້າງຢູ່ເປັນຈຳນວນຫລາຍທີ່ຖື ວ່າແຫລມມາລາຢູ ເປັນບ້ານຖາວອນຂອງພວກເຂົາ ໂຮມທັງອີກຫລາຍພັນຄົນທີ່ມາ ເກີດຢູ່ທີ່ນັ້ນ. ເຖິງວ່າ ລັດມາເລ ທີ່ບໍ່ໄດ້ເຂົ້າຮ່ວມສະຫະພັນທະນະລັດ (Unfederated Malay States UMS), ລັດຍະໂຮຣ໌ (Johore) ທີ່ພັດທະນາຫລາຍກວ່າຫມູ່ໃນເລື່ອງເສດຖະກິດສິ່ງອອກ, ມາຮອດປີ 1931 ກໍມີອົງປະກອບຄ້າຍຄື ກັນຫລາຍ ໃນດ້ານພົນລະເມືອງ ຄືມີຄົນຫລາຍເຊື້ອຊາດຢູ່ນຳກັນຄືກັນ ກັບ ສະຫະພັນທະລັດມາເລ (Federated Malay Stataes FMS) ແລະ ລັດເກດະ (Kedah) ມີພົນລະເມືອງເປັນຄົນຕ່າງດ້າວຫລາຍ ຄືກັນ. ຄ້ອຍລົງມາທາງ ຝັ່ງຕາເວັນຕົກເຊິ່ງມີ ປີນັງ ແລະ ສິງກະໂປ ເປັນຈຸດສຳຄັນທາງກ້ຳເໜືອ ແລະ ກ້ຳໃຕ້ ກັບ ກວາລາລຳເປີ (Kuala Lumpur) ເປັນເມືອງຫລວງຂອງສະຫະພັນຢູ່ເຄິ່ງກາງ ມີປະຊາກອນ ເຊື້ອ ສາຍຈີນ ທັງສາມເມືອງ ນີ້ ລ້ວນມີລະບົບເສັ້ນທາງລົດໄຟ ໂທລະສັບ ແລະໂທລະເລກ ແບບຄົບຊຸດ ທີ່ກາຍເປັນຮ່າງກະດູກ ແລະ ສາຍເອັນ ສຳລັບເສດຖະກິດສິ່ງອອກ ມີລາຍໄດ້ສູງຮອດ 10 ລ້ານ ໂດລາ ສເຕຣຕ (Straits dollars/ເງິນຕາ ໃຊ້ໃນເຂດຊ່ອງແຄບມາເລ) ໃນປາຍຊຸມປີ 1880 ສູງຂຶ້ນເປັນ 300 ລ້ານ ໂດລາ/ປີ ພໍດີກັບກ່ອນການຕົກຕ່ຳ ທາງເສດຖະກິດໂລກ ປີ 1930.

ເຖິງແນວໃດກໍດີ ການປ່ຽນແປງສ່ວນຫລາຍ ທັງໆທີ່ມີລັກສະນະປະຕິວັດ ແລະຍືນຍາວຢູ່ ກໍບໍ່ໄດ້ມີ ຜົນກະທົບ ຕໍ່ຊາວມາເລ ໂດຍທັນທີທັນໃດ ຫລື ໂດຍກົງໆ. ບໍ່ແມ່ນວ່າຊີວິດຂອງຊາວມາເລດຳເນີນໄປຢ່າງສະ ຫງົບສຸກແບບບໍ່ຂາດວັກຂາດຕອນດອກ, ມັນເຫັນໄດ້ຈະແຈ້ງຢູ່ວ່າ ມີຫລາຍຢ່າງ ເກີດຂຶ້ນເພື່ອຫັກເຫໂລກະທັດ ຂອງຊາວນາ ການປ່ຽນແປງທີ່ເກີດຂຶ້ນນັ້ນ ເຖິງແມ່ນບໍ່ສອດຄອງ ຫລືດຳເນີນໄປຕາມທິດທາງຂອງພວກເຂົາ ຫລືຍ້ອນອຸບັດເຫດຕ່າງໆໃນລະຍະການປົກຄອງ ຂອງອັງກິດ ແຕ່ຢ່າງດຽວ ແລະການປ່ຽນແປງໄດ້ເກີດຂຶ້ນ ຢູ່ກະໂຕພາຍໃນການຄົງຕົວຢູ່ຢ່າງຫນຽວຫມັ້ນໂດດເດັ່ນ ຂອງອົງການຈັດຕັ້ງທາງສັງຄົມເກົ່າ ໃນຮູບແບບ ຕາມປະເພນີ. ການຢູ່ແບບກະແຈກກະຈາຍຂອງປະຊາກອນ ມາເລ ແລະການຜູກພັນຢູ່ກັບກິດລະບຽບທາງ ສັງຄົມຕາມປະເພນີ ທີ່ອີງໃສ່ບ້ານ ແລະການປູກຝັງນັ້ນ ຫມາຍຄວາມວ່າ ມີຊາວມາເລ ບໍ່ເທົ່າໃດຄົນດອກ

ທີ່ມີຄວາມກຽມພ້ອມ ແລະປາຖະຫນາ ຢາກເຮັດວຽກງານຮັບຈ້າງ ອັນຈຳເປັນຫລາຍສຳລັບການພັດທະນາ ແບບເຮັ່ງຮີບ ຂອງອຸດສາຫະກຳສິ່ງອອກ ແລະ ສິ່ງອຳນວຍຄວາມສະດວກ ທີ່ກ່ຽວຂ້ອງ. ນະໂຍບາຍອັງກິດ ໃນແຫລມມາລາຢູ ຈຶ່ງຕ້ອງວາງຢູ່ບົນພື້ນຖານ ແຫ່ງພັນທະພາບແບບຕ່າງຝ່າຍ ຕ່າງໄດ້ຮັບຜົນປະໂຫຍດ ກັບຊົນຊັ້ນປົກຄອງຂອງມາເລ. ໃນທຳນອງດຽວກັນ ເພື່ອໃຫ້ໄດ້ມາ ເຊິ່ງສິດທິໃນການພັດທະນາເສດຖະກິດ ການຂຸດຄົ້ນແບບທັນສະໄຫມຢູ່ໃນ ບ້າເນເກຣິ (ບ້ານຊາວປະມົງ negeri) ໂດຍອາໄສແຮງງານອົບພະຍົບ ຕ່າງດ້າວ, ອັງກິດ ໄດ້ລົງມືເພື່ອຮັກສາ ຖານະຕຳແຫນ່ງ ແລະກຽດສັກສີ ອັນຫນັກແຫນ້ນຂອງຊົນຊັ້ນປົກ ຄອງ ແລະເພື່ອຍັບຍັ້ງການຊຸກສິ່ງ ຊາວມາເລ ເຂົ້າໄປສູ່ໂລກສະໄຫມໃຫມ່. ຄວາມສຳພັນແບບໄມ້ຄ້ຳ ກ້ວຍ-ກ້ວຍຄ້ຳໄມ້ ແນ່ນອນເຮັດໃຫ້ສຸນລະຕານ ແລະພວກຫົວຫນ້າຂົງເຂດຕ່າງໆຫມົດອຳນາດໃນການຕັດສິນ ໃຈ ຫລື ນະໂຍບາຍເກືອບທັງຫມົດ ແຕ່ຍັງມີຍຸດໂທບາຍອັນຫນຶ່ງເຂົ້າມາຊ່ວຍ ນັ້ນຄືການລະມັດລະວັງຄືກັບ ໃນເລື່ອງທີ່ແຕ່ງຂຶ້ນເປັນນິຍາຍ ທີ່ວ່າ ພວກສຸນລະຕານ ເປັນເຈົ້າປົກຄອງຕົນເອງ ແຕ່ປະຕິບັດການຕາມຄຳຊີ້ ແນະຂອງຜູ້ສຳເລັດລາຊະການ ປະຈຳພາກຊື່ໆ ເຊິ່ງເບິ່ງໃນບາງດ້ານກໍແມ່ນຜູ້ຮັບໃຊ້ຂອງພວກເຂົານັ້ນເອງ. ເຖິງວ່ານິຍາຍ ແຕ່ງຂຶ້ນເລື່ອງນີ້ ໄດ້ຈາງຫາຍໄປ ໃນລັດມາເລນອກສະຫະພັນ ໄວເທົ່າກັບຢູ່ໃນລັດສະມາຊິກ ສະຫະພັນລັດມາເລ (ບ່ອນມີການປະທ້ວງເລັກໆນ້ອຍໆ ຄັດຄ້ານການໂຮມລັດຕ່າງໆເຂົ້າກັນຕາມອຳເພີໃຈ) ທີ່ກ່ໃຫ້ເກີດມາດຕະການ ໃນການກະຈາຍອຳນາດໃນຊຸມປີ 1920, ບັດນີ້ບ່ມີບ່ອນໃດສາມາດປິດອຳຄວາມເປັນ ຈິງທີ່ວ່າ ຜູ້ປົກຄອງລັດທັງຫລາຍຖືກມັດມືມັດຕີນໄວ້ກັບນະໂຍບາຍຕ່າງໆຂອງ ອັງກິດ ໃນອັດຕາສ່ວນແບບ ກົງໆ ຂອງມູນຄ່າລັດຂອງພວກເຂົາ ຕໍ່ມູນຄ່າຂອງເສດຖະກິດການສິ່ງອອກ.

ເຖິງຢ່າງໃດກໍດີ, ການເວົ້າວ່າ ພວກສຸນລະຕານ ຫມົດສ້ຽງອຳນາດສຳຄັນທັງຫມົດໃນການຕັດສິນໃຈ ແລະການຄວບຄຸມນັ້ນ ກໍແມ່ນທັດສະນະແບບຕາເວັນຕົກ. ພາຍໃນສັງຄົມຂອງ ມາເລເອງ ພວກສຸນລະຕານ ບ່ພຽງແຕ່ຢູ່ໃນຖານະສູງສົ່ງເທົ່ານັ້ນ ແຕ່ຍັງມີຕຳແຫນ່ງອັນຫມັ້ນຄົງເຂັ້ມແຂງຫລາຍຂຶ້ນ ດ້ວຍການປັບປຸງ ກົງຈັກແບບໂຮມສູນຂອງລັດຖະບານ ພາຍໃຕ້ຄັນຕະລະບັດອັງກິດ, ດ້ວຍການຫລຸດຖານະຂອງພວກຫົວຫນ້າ ເຂດເຊິ່ງແຕ່ກ່ອນມັກຊ່ວງເສັ່ງກັນລົງມາຮັບ ພະລາຊະທິນນະນາມ ແລະຮັບບຳເນັດບຳນານ ຫລືເປັນພະນັກ ງານລັດກິນເງິນເດືອນຈາກລັດຖະບານ ແລະດ້ວຍການເສີມຕື່ມຄວາມເຂັ້ມແຂງ ໃຫ້ແກ່ການກວດກາດູແລ ສາສະຫນາຕາມປະເພນີ ແຕ່ຫາກໃນເມື່ອກ່ອນບ່ໄດ້ປະຕິບັດເທົ່າໃດ. ຂໍ້ຄວາມສຳຄັນໃນຂໍ້ຕົກລົງກ່ຽວກັບລັດ ໃນອາລັກຂາທີ່ຕົກລົງກັນໄວ້ ລະຫວ່າງ ມາເລ ກັບ ອັງກິດ ທີ່ຍົກອອກມາຈາກເລື່ອງ "ການຊີ້ແນະ"ຂອງຜູ້ ສຳເລັດລາຊະການປະຈຳພາກ ແຕະຕ້ອງເຖິງ "ສາສະຫນາ ແລະປະເພນີ ມາເລ" ທັງສິ່ງເສີມໃຫ້ກັບໄປ ຫາເລື່ອງ ພິທີກຳຕ່າງໆ ທີ່ກ່ຽວກັບຊີວິດ ຊາວມາເລ ແລະອັນສຳຄັນກວ່ານີ້ ແມ່ນການສ້າງຕັ້ງສະຖາບັນ ໃນຮູບແບບໃດຮູບແບບຫນຶ່ງ ເພື່ອການ ປົກຄອງບໍລິຫານແລະຕຸລາການ ສຳລັບລັດຖະບານອິດສະລາມ. ເປັນທີ່ຮູ້ຈັກນຳກັນວ່າ ທັງສະພາມດສະລິມ ແລະປະເພນີຂອງ ຊາວມາເລສ່ວນຫລາຍແລ້ວໄດ້ຮັບການສ້າງ ຕັ້ງຂຶ້ນໂດຍຝ່າຍປົກຄອງ ແລະກໍຂຶ້ນກັບພວກເຂົາ. ສະຖາບັນເຫລ່ານີ້ ກາຍເປັນຄັງສາງສຳຄັນຂອງແຫລ່ງ ອຳນາດຕາມປະເພນີ ແລະ ນິຍົມຕາມຮີດເດີມ ໃນດ້ານການພົວພັນກັບສັງຄົມມາເລທັງຫມົດ.

ຜົນກະທົບ ຈາກການປົກຄອງຂອງອັງກິດ ບ່ໄດ້ເຮັດໃຫ້ບົດບາດ ທີ່ພວກຂຸນນາງສະແດງໃນສັງຄົມ ມາເລ ຢຸດສະງັກໄປຢ່າງຈິງຈັງ, ເມື່ອເລີ່ມຕົ້ນປັບປ່ຽນເຂົ້າກັບການຍົກເລີກສິດທິ ໃນການເກັບພາສີ ແລະສິດ ພິເສດອື່ນໆ ຂອງຄວາມເປັນເອກະລາດແຫ່ງດິນແດນ ຜ່ານພົ້ນໄປແລ້ວ. ເປັນຄວາມຈິງຢູ່ວ່າ ຢູ່ໃນຫລາຍໆ ບ່ອນ ພວກເຂົາເຈົ້າບ່ໄດ້ເປັນນັກການເມືອງແລ້ວ ແລະຄວາມສຳຄັນຂອງເລື່ອງນີ້ ບ່ຄວນຖືກຫລຸດລົງ. ແຕ ພວກຫົວຫນ້າອາວຸໂສ ໂດຍສະເພາະຜູ້ທີ່ລຸກຂຶ້ນຕ່ໍສູ້ ແຮ່ງຕ່ໍສູ້ທ່ໍໃດ ກໍແຮ່ງເສຽ ຜັດໄດ້ສະແດງບົດບາດ ອັນເດັດດ່ຽວຢູ່ໃນລັດຖະສະພາ (ຫນ້າທີ່ອັນມີຄວາມຫມາຍຫລາຍທີ່ສຸດສຳລັບລັດນອກ ສະຫະພັນທະລັດ ຫລາຍກວ່າໃນລັດສະຫະພັນ) ແລະໂຄງສ້າງທາງເຂດດິນ ຢູ່ໃນການຈັດຕັ້ງຂອງຂຸນນາງ ມາເລ ຕາມແບບ

ປະເພນີ ໄດ້ຖືກຮັກສາໄວ້ຄຽງຄູ່ກັບລະບົບລາຊະການແບບຮວມສູນແນວໃຫມ່ ໃນລະດັບພຽງພໍ ເພື່ອໃຫ້ ພວກເຈົ້າເມືອງ ມີຄວາມຮັບຜິດຊອບຢູ່ອີກຕໍ່ໄປ ສຳລັບຊີວິດຕາມປະເພນີຂອງຊາວມາເລ. ເພື່ອເປັນການ ຕອບແທນ ພວກເຈົ້າເມືອງເຫລົ່ານີ້ໄດ້ຮັບຮາງວັນເປັນເງິນບຳນານ ແລະເງິນເດືອນ ແລະທ່າດີ ເໜືອກວ່າ ທາງເສດຖະກິດອັນອື່ນໆ ເຊັ່ນ ການເຂົ້າເຖິງທີ່ດິນທີ່ຍັງມີຢູ່ ຫລື ການຈັບຈອງເປັນເຈົ້າຂອງທີ່ດິນ, ບໍ່ແຮ່ ແລະ ອັນອື່ນທີ່ຄ້າຍຄືກັນ.

ໃນສະຫະພັນທະລັດມາເລ ຫລັງການປ່ຽນສະຕະວັດແລ້ວ ພວກຂຸນນາງ ຊາວມາເລຮຸ່ນໃຫມ່ໄດ້ຮັບ ການສຶກສາ ແລະການຝຶກອົບຮົມພິເສດ ທີ່ສະຫງວນໄວ້ສຳລັບພວກລູກຫລານຂອງຄົນຊັ້ນສູງຕາມຮີດຄອງ ແລະໄດ້ຮັບການສັບຊ້ອນເຂົ້າເປັນຂ້າລາຊະການອານານິຄົມ. ເຖິງແມ່ນວ່າ ຕຳແໜ່ງທີ່ພວກເຂົາໄດ້ຮັບຕ່ຳ ກວ່າຕຳແໜ່ງຂ້າລາຊະການພົນລະເຮືອນຂອງຄົນເອີຣົບກໍຕາມ ຕຳແໜ່ງຫົວໜ້າການປົກຄອງ ທີ່ຕັ້ງຂຶ້ນ ມາເຊັ່ນນັ້ນ ກໍຍັງມີທ່າເໜືອກວ່າຢູ່ສອງຢ່າງຄື ສູງກວ່າ ຄົນມາເລ ທີ່ມີພື້ນຖານມາຈາກຊາວບາ ຜູ້ທີ່ ບໍ່ມີໂອກາດທາງການສຶກສາແບບດຽວກັນ ແລະສູງກວ່າ ບຸກຄົນທີ່ບໍ່ແມ່ນຄົນມາເລຜູ້ທີ່ຖືກກີດກັນຈາກຕຳ ແໜ່ງປົກຄອງ ຫລືຕຳແໜ່ງບໍລິຫານລະດັບສູງໃນລະບົບຂ້າລາຊະການ ພົນລະເຮືອນ ຫລືຖັນແຖວພະນັກ ງານໃນຜະແນກບໍລິການ ປະຊາຊົນ ພະນັກງານມາເລ ເຊິ່ງຕາມທຳມະດາຖືກສັບຊ້ອນໃຫ້ເຮັດວຽກດ້ານ ການປົກຄອງໃນຊົນນະບົດ ຖ້າມກາງປະຊາຊົນຂອງຕົນເອງ ບ່ອນທີ່ພວກເຂົາປະຕິບັດໜ້າທີ່ການງານເຖິງ ວ່າມີ ຄວາມແຕກຕ່າງກັນຍິບຍ່ອຍ ຢ່າງໜ້ອຍກໍຍັງພໍປຽບທຽບໄດ້ກັບໜ້າທີ່ການຂອງຜູ້ມາປົກຄອງດິນ ແດນມາເລ ສະໄໝທຳອິດ ຕາບເທົ່າທີ່ຂອດສຳພັນອັນຊັບຊ້ອນລະຫວ່າງຊາວບາກັບພວກເຊື້ອເຈົ້າກຽວ ຂ້ອງນຳ. ກຽດສັກສີ ແລະອຳນາດໜ້າທີ່ເຊິ່ງມີມາກັບສະຖານະພາບຕ່າງໆທາງສັງຄົມຕາມປະເພນີຈຶ່ງຖືກ ເນັ້ນຍ້ຳຊ້ຳແລ້ວຊ້ຳອີກ ໂດຍອຳນາດການປົກຄອງ ທີ່ແຜ່ງປ່ຽນມາຈາກລະບອບອານານິຄົມ. ຮູບແບບນັ້ນ ຖືກກ່າຍແບບຊ້ຳ ແລະແນ່ນອນວ່າເຂັ້ມຂຸ້ນຢູ່ພາຍໃນລັດນອກ ສະຫະພັນທະລັດມາເລ ບ່ອນທີ່ເຫດການກຽວ ກັບການເຂົ້າມີສ່ວນຮ່ວມໂດຍກົງຂອງອັງກິດ ໃນການບໍລິຫານທ້ອງຖິ່ນ ມີໜ້ອຍກວ່າ. ມີແຕ່ຢູ່ໃນ ລັດເກດະຫ໌ ແຫ່ງດຽວ ທີ່ມີບາງສິ່ງບາງຢ່າງຄ້າຍຄືກັບການບໍລິຫານຢ່າງເປັນເອກະລາດແທ້ໆຂອງຊາວມາເລ ແບບ ສະໄໝໃຫມ່ ພາຍໃຕ້ການຊີ້ແນະຂອງ ອັງກິດ, ເຖິງແມ່ນວ່າໃນ ລັດໂຢໂຮເຣ ສະຖາບັນອັນເຂັ້ມແຂງຂອງ ຂຸນນາງ ຍັງຄົງຍຶດກິດຈະການ ຂອງຄົນມາເລໄວ້ຢ່າງເຂັ້ມແຂງ ເຖິງແມ່ນວ່າທິດທາງວຽກງານການບໍລິ ຫານໂດຍທົ່ວໄປຕົກຢູ່ໃນກຳມືຂອງພວກເຂົາ ພຽງແຕ່ໃນນາມກໍຕາມ. ໃນລັດທີ່ຢູ່ຊາຍຝັ່ງດ້ານຕາເວັນອອກ ຄື ກາລັນຕັນ ແລະ ແຕຣງກຣານູ (Kalantan & Trengganu) ເຊິ່ງຫຍັບເຂົ້າໃກ້ໂລກສະໄໝໃຫມ່ຢ່າງຊ້າໆ ເທົ່ານັ້ນ ພວກຂຸນນາງມາເລ ສ່ວນຫລາຍຍັງຄົງຢູ່ຢ່າງປອດໄພດີ.

ການຄົງຕົວຢູ່ຂອງ ຊາວມາເລ ຊົນຊັ້ນຂຸນນາງຕາມປະເພນີໃນທ່ວກ່ວດອນມາລາຢູ ບ່ວ່າໃນຮູບ ແບບບູຮານ ຫລືໃນລະບົບຂ້າລາຊະການແບບໃຫມ່ ດຳເນີນຄູ່ຂະໜານໄປກັບການຫາຍໜ້າຫາຍຕາໄປ ຂອງຊາວນາມາເລ ໃນເລື່ອງການມີສ່ວນຮ່ວມຢູ່ໃນເສດຖະກິດສົ່ງອອກ ທີ່ພວມເບັ່ງບານປານ ດອກເຫັດ ທັງ ໃນຖານະທີ່ເປັນສ່ວນໜຶ່ງຂອງກຳລັງແຮງງານ ຫລື ໃນນາມເປັນຜູ້ຮັບເໝົາທຸລະກິດ. ດ້ວຍຄວາມເອົາຈິງ ເອົາຈັງ ພວກອັງກິດ ສະແຫວງຫາແນວທາງເພື່ອກີດກັນສັງຄົມຊາວນາມາເລ ອອກຈາກການສົ່ງຜົນກະທົບ ດ້ານທຳລາຍຂອງກົດເກນເສດຖະກິດແບບໃຫມ່ ສ່ວນໜຶ່ງຢູ່ໃນຜົນປະໂຫຍດ ແຫ່ງຄວາມສຳພັນແບບລັດ ໃນອາລັກຂາ ກັບ ທັດສະນະຕາມອາລົມອ່ອນໄຫວຂອງພູມພາບຊີວິດຊາວບ້ານ, ສ່ວນໜຶ່ງເປັນວິທີການຮັບ ປະກັນ ສືບຕໍ່ການຜະຫລິດອາຫານ ແລະສ່ວນໜຶ່ງ ເພື່ອຫລີກເວັ້ນ ຜົນສະທ້ອນທາງການເມືອງ ທີ່ເບິ່ງຄືວ່າ ຈະແລ່ນນຳກົ້ນ ໄຮ້ຮູບແບບຈັດຕັ້ງໂດຍພື້ນຖານໃດໆ ຂອງເສດຖະກິດແບບຊາວນາ. ຊົນຊັ້ນປົກຄອງຊາວມາ ເລ ຕາມປະເພນີເຫັນພ້ອງຕ້ອງກັນຢ່າງຂັນແຂງ ໃນມາດຕະການທີ່ໃຫ້ຜົນປາກົດອອກມາ. ບັນຫາການຊອກ ຫາກຳລັງແຮງງານ (ລະດັບເລຂາ ແລະ ລະດັບເຕັກນິກ ຫລື ປະເພດໃຊ້ແຮງງານ) ເພື່ອຂະຫຍາຍ

ອຸດສາຫະກຳການສົ່ງອອກ ແລະແຮງງານຂ້າລາຊະການຂອງລັດຖະບານທີ່ມີມາແຕ່ເກົ່າ ໄດ້ຮັບການແກ້ໄຂ ດ້ວຍການນຳເຂົ້າພວກກຳມະກອນ ອົບພະຍົບຈາກຈີນພາກໃຕ້, ຈາກອິນເດຽ ອັງກິດ ແລະຈາກຊີລອນ. ການ ມີທີ່ດິນຢ່າງຫລວງຫລາຍ ທີ່ບໍ່ທັນຈັບຈອງ ເຮັດໃຫ້ການແຈກຢາຍທີ່ດິນຕອນກວ້າງໆ ໃຫ້ແກ່ອຸດສາຫະກຳ ການປູກຝັງ ຂອງຊາວ ເອີຣົບ ແລະຊາວຈີນ ເປັນໄປຢ່າງສະດວກ ໂດຍບໍ່ມີການບຸກຮຸກທີ່ດິນເຊິ່ງຊາວມາ ມາເລຈັບຈອງແລ້ວ. ນະໂຍບາຍກ່ຽວກັບດິນຖືກກຳນົດຂຶ້ນ ເພື່ອອອກໃບຕາດິນແກ ຊາວມາເລເປັນລາຍ ບຸກຄົນ, ເພື່ອໃຫ້ຊາວບາ ຢູ່ໃນຖານະສືບທອດມໍລະດົກຂອງພໍ່ ແລະເພື່ອສົ່ງເສີມການປູກພືດຕາມຊະນິດເດີມຕໍ່ ໄປໂດຍສະເພາະແລ້ວເຂົ້ານາດຳ. ມາດຕະການເຊັ່ນນັ້ນຖືກເສີມດ້ວຍລະບົບການສຶກສາ ດ້ວຍພາສາທ້ອງ ຖິ່ນຢູ່ຂັ້ນປະຖົມ (ເປັນພາສາມາເລ ສຳລັບຊາວມາເລເທົ່ານັ້ນ) ເຊິ່ງເຖິງແມ່ນວ່າໄດ້ແຜ່ກວ້າງອອກແລ້ວ ຢ່າງຫນ້ອຍ ກໍຢູ່ໃນລັດມາເລ ໃນສະຫະພັນກໍມີຈຸດປະສົງຕົ້ນຕໍຂອງມັນຄື ການສ້າງຕັ້ງຊຸມຊົນຊາວກະສິກອນ ຜູ້ມີສັກສີແລະຂະຫຍັນຂັນແຂງ "ມີສະຕິໃນກຽດສັກສີ ທີ່ຜູກພັນຢູ່ກັບວຽກງານການຖາກໄມ້ແລະການຕັກນ້ຳ."

ເຖິງແມ່ນວ່າຜົນກະທົບໂດຍທົ່ວໄປ ຂອງນະໂຍບາຍ ແລະການປະຕິບັດເຫລົ່ານີ້ ແມ່ນການຫລຸດຜ່ອນ ຜົນກະທົບ ແລະ ອັດຕາສ່ວນການປ່ຽນແປງທາງສັງຄົມ - ເສດຖະກິດຂັ້ນບ້ານ, ນີ້ບໍ່ແມ່ນການຈົງໃຈເວົ້າວ່າ ການປ່ຽນແປງເຫລົ່ານັ້ນບໍ່ໄດ້ເກີດຂຶ້ນ ແຕ່ຢາກເວົ້າວ່າ ນະໂຍບາຍເຫລົ່ານັ້ນ ບໍ່ເຖິງຖອງທັງໃນດ້ານກວ້າງ ຫລື ໃນດ້ານໂຄງສ້າງອັນສະທ້ອນອອກມາ. ການອອກໃບຕາດິນສ່ວນບຸກຄົນ ມີທ່າອຽງສົ່ງເສີມທັງການຂາຍ ແລະ ການຈອງຈຳທີ່ດິນຂອງຊາວບາ ເຖິງແມ່ນວ່າ ລັດຖະບານໄດ້ພະຍາຍາມເພື່ອໃຫ້ມີການການປ້ອງກັນ ແລະ ການຫລຸດຫນີ້ສິນຂອງຊາວຊົນນະບົດ, ເພື່ອປົກປັກການ ຊື້ຂາຍທີ່ດິນບາງປະເພດ ໂດຍການສ້າງໂຄງ ການອະນຸຮັກ ມາເລ ເຊິ່ງໃນນັ້ນທີ່ດິນທີ່ມີ ສາມາດຖືກຊື້ - ຂາຍໄດ້ໃຫ້ແຕ່ກັບຄົນມາເລນຳກັນເທົ່ານັ້ນ. ຜົນຮັບອັນຫນຶ່ງກໍແມ່ນເພື່ອປົບລາຄາທີ່ດິນຂອງຊາວ ມາເລໄວ້ ແລະເພື່ອສົ່ງເສີມການພັດທະນາເສດຖະກິດ ຂອງມາເລ ຈາກມູນຄ່າອັນຫນ້າສົງໄສຕໍ່ຊາວບາໂດຍການຈຳກັດເຈົ້າທີ່ດິນ ທີ່ບໍ່ເປັນຄົນມາເລ. ການເຂົ້າ ມີສ່ວນຮ່ວມແບບຫນັກແຫນ້ນ ຂອງຊາວມາເລ ໃນເສດຖະກິດການສົ່ງອອກ ຄືວ່າຊາວບາຈຳນວນຫລາຍ ເຂົ້າມາເປັນເຈົ້າຂອງສວນຢາງ ຂະຫນາດນ້ອຍ ລຸນຫລັງປີ 1910 ເພື່ອເປັນວິທີການຫາລາຍໄດ້ເປັນເງິນສົດ ໄດ້ນຳໄປສູ່ການຫັນປ່ຽນມາເປັນເສດຖະກິດລະບົບເງິນຕາຢ່າງເຂັ້ມຂຸ້ນຢູ່ໃນພາກສ່ວນຊາວບາ, ແຕ່ໃນບໍ່ເທົ່າ ໃດປີຕໍ່ມາ ໂດຍເຫັນແກ່ຜົນປະໂຫຍດຂອງການຜະຫລິດອາຫານ ແລະ ຕໍ່ມາໂດຍເຫັນແກ່ລະບົບກົດເກນອັນ ເຄັ່ງຄັດ ຢູ່ໃນການສົ່ງເສີມການປູກຢາງ ລັດຖະບານໄດ້ນຳເອົາກົດຫມາຍ ເຂົ້າມາໃຊ້ເຊິ່ງໄດ້ຈຳກັດການ ປູກຢາງໃຫມ່ຂອງຊາວສວນມາເລ. ນອກຈາກນີ້ ມີຄົນກາງທີ່ບໍ່ແມ່ນຊາວມາເລ ເຂົ້າມາຄວບຄຸມການກະ ກຽມການຕະຫລາດ ຍຶດເອົາຜົນກຳໄລ ອັນມີຜົນໃຫ້ການກະຕຸ້ນຫລຸດຜ່ອນລົງຢ່າງຫນ້າເປັນຫ່ວງ ຈົນເຖິງຂັ້ນ ວ່າການຜະຫລິດຢາງໄດ້ສົ່ງຜົນກະທົບຕໍ່ມາໃສ່ຊີວິດເສດຖະກິດຂອງຊາວມາເລ. ເຖິງວ່າເປັນຢ່າງນີ້ກໍຕາມ ລາຍໄດ້ຂອງຊາວສວນຢາງ (ຮອດລະຍະຕົກຕ່ຳໃນຊຸມທ້າຍປີ 1920) ກໍໄດ້ເຮັດໃຫ້ຊາວມາເລບາງຄົນ ເຊິ່ງ ໃນຮຸ່ນຫນຶ່ງ ໄດ້ເປັນພຽງເຈົ້າຂອງສວນຂະຫນາດນ້ອຍ ແຕ່ກໍສາມາດສັນຫາການສຶກສາທີ່ດີກວ່າການສຶກສາ ຢູ່ກັບບ້ານໃຫ້ແກ່ລູກຫລານຊາຍຂອງຕົນ ແລະ ນັ້ນກໍແມ່ນໂອກາດອັນດີສຳລັບພວກເຂົາທີ່ຈະເລື່ອນເຂົ້າສູ່ຖັນ ແຖວພະນັກງານ ຂອງລັດຖະບານ.

ຫມາກຜົນສຳຄັນອັນຫນຶ່ງ ຂອງການຍຶດຄອງການຂາຍຍົກ ໂດຍຊາວນາມາເລ ຢູ່ໃນສັງຄົມກະສິກຳ ຕາມປະເພນີ ກໍແມ່ນການມີບົດບາດເລັກໆນ້ອຍໆຂອງຊາວມາເລ ຢູ່ໃນການດຳລົງຊີວິດໃນຕົວເມືອງ ຂອງ ລັດທີ່ຜັດທະນາ ແບບຕາເວັນຕົກ ຫລື ໃນບໍລິເວນຊ່ອງແຄບ ແລະ ຜົນຂອງການໂດດດ່ຽວ ຂອງຕົນຈາກ ການປ່ຽນແປງທາງສັງຄົມທີ່ອຸບັດຂຶ້ນ ໃນຍົງເຂດຕົວເມືອງ. ເວົ້າເປັນຕົວເລກຄົນມາເລ ໃນປີ 1921 ມີປະ ມານ 10 % ຂອງປະຊາກອນໃນຕົວເມືອງຂອງກົ່ວດອນ ຕົວເລກນີ້ ຄົງທ່ຳກັບປະມານ 4% ຫລື 5%ຂອງປະຊາ ກອນມາເລທັງຫມົດ. ອັດຕາສ່ວນເຫລົ່ານີ້ ເພີ່ມຂຶ້ນຊ້າໆ ໃນລະຍະສອງທົດສະວັດຕໍ່ມາທັງໆທີ່ມີການນຳ ເອົານະໂຍບາຍຕ່າງໆເຂົ້າມາໃຊ້ ເພື່ອຫລຸດຜ່ອນຈຳນວນຄົນທີ່ບໍ່ແມ່ນ ຄົນມາເລ ຢູ່ໃນຕຳ ແຫນ່ງວຽກງານ

ຂັ້ນຕ່ຳໃນລັດຖະການ ໂດຍສະເພາະ ໃນເຂດຕົວເມືອງ. ເຖິງອົງປະກອບ ທີ່ເປັນຊາວມາເລ ໃນສັງຄົມເມືອງ ເອງ ມີຈຳນວນຫນ້ອຍດຽວ ກໍຍັງມີຄວາມສຳຄັນຢ່າງຍິ່ງສຳລັບຂະບວນການຊາດນິຍົມທັງ ຫລາຍໃນເວລາ ຕໍ່ມາ, ພວກຊາວມາເລ ສ່ວນຫລາຍຖ້າບໍ່ໄດ້ຮູ້ຈັກກັບຕົວເມືອງເຫລົ່ານີ້ ຈັກຫນ້ອຍ ຍັງຄົງເຫັນວ່າ ຕົວເມືອງ ເປັນຖິ່ນອື່ນ ແລະ ແປກປະຫລາດຢູ່.

ເຖິງແມ່ນວ່າ ບາດກ້າວເດີນແຫ່ງການປ່ຽນແປງທາງສັງຄົມ ໃນຫມູ່ຊາວມາເລ ແຫ່ງກ່ວດອນ ໄດ້ດຳເນີນໄປຊ້າໆ ແລະມີຂອບເຂດຈຳກັດ ເມື່ອປຽບທຽບໃສ່ກັບປະຊາຊົນຜູ້ເຄີຍຫຍຸ້ງກ່ຽວ ຢ່າງຮຸນແຮງ ກັບການ ຜັດທະນາເສດຖະກິດສະໄຫມອານານິຄົມແລ້ວ ລະຍະເວລາສັ້ນໆ ຂອງການປົກຄອງອັງກິດ ກ່ອນປີ 1941 ກໍຍັງໄດ້ ເປັນພະຍານ ໃຫ້ແກ່ການປາກົດຕົວຂອງຫນໍ່ແຫນງລັດທິຊາດນິຍົມຂອງຊາວມາເລ, ຊຶ່ງ ທຳອິດ ຮຽກຮ້ອງໃຫ້ພັກດີຕໍ່ສາສະຫນາ ເຊື້ອຊາດແລະພາສາ ແລະເກືອບບໍ່ຢູ່ນອກເຫນືອຂອບເຂດລັດ ຕາມ ປະເພນີໄປ ແຕ່ໃນທີ່ສຸດ ກໍມາສະແຫວງຫາຊຸມຊົນການເມືອງແບບສະເພາະໃດຫນຶ່ງ ທີ່ຈະກອບກູ້ຜົນປະ ໂຫຍດຂອງຊາວມາເລ ຕ້ານກັບຜົນປະໂຫຍດ ຂອງວັດທະນະທຳຊາວຕ່າງດ້າວຫລາຍຫມື່ນຄົນ ເຊິ່ງບັດນີ້ ປະກາດຕົນເປັນຄົນຢູ່ປະຈຳໃນກ່ວດອນ. ໃນຂະນະທີ່ຂະບວນການຮັບຮູ້ຕົນເອງພວມເຕີບໃຫຍ່ຂຶ້ນນີ້, ກໍສາມາດ ຈຳແນກກຸ່ມຊົນຊັ້ນນຳສາມກຸ່ມ ທີ່ພົ້ນໂຜ່ຂຶ້ນມາໃນສັງຄົມມາເລ, ແຕ່ລະກຸ່ມຕິດພັນກັບສະພາບແວດລ້ອມ ການສຶກສາແບບພິເສດຂອງຕົນ ແລະໃນທຳນອງດຽວກັນ ແຕ່ລະກຸ່ມຍັງສະຫນອງວິໄສທັດຂອງຕົນເອງ ອອກມາ ໂດຍອີງໃສ່ຜົນປະໂຫຍດ ແລະເບື້ອງຫລັງຂອງສິ່ງທີ່ສັງຄົມມາເລ ຈະຕ້ອງເປັນໄປເພື່ອຢູ່ລອດ ແລະ ຮັ່ງມີສີສຸກໃນໂລກສະໄຫມໃຫມ່. ກຸ່ມທຳອິດມີພື້ນຖານເຕີບໃຫຍ່ ຈາກຂະບວນການປະຕິຮູບການສຶກສາ ດ້ານ ສາສະຫນາອິດສະລາມ, ກຸ່ມທີສອງແມ່ນ ພວກປັນຍາຊົນມາເລຜູ້ມີການສຶກສາ ແລະ ເຖິງຖອງ ແລະ ກຸ່ມ ທີສາມແມ່ນ ພວກພະນັກງານ ທີ່ໄດ້ຮັບການສຶກສາໃນພາສາອັງກິດ ເຊິ່ງຜູ້ມີຕຳແຫນ່ງສູງໆ ກໍລ້ວນແຕ່ ສືບທອດກັນມາແຕ່ຊົນຊັ້ນນຳຮຸ່ນເກົ່າ.

ຂະບວນການປະຕິຮູບທາງສາສະຫນາ ມີຕົ້ນກຳເນີດທາງອຸດົມການຢູ່ໃນການຟື້ນຟູ ສາສະຫນາ ອິດ ສະລາມ ເຊິ່ງກໍ່ເກີດຂຶ້ນໃນພາກຕາເວັນອອກກາງ ລະຫວ່າງ ທ້າຍສະຕະວັດທີ 19. ພວກມຸດສະລິມ ຊາວມາ ເລ ໂດຍກຳເນີດເຊິ່ງບາງທີກໍສືບເຊື້ອສາຍຈາກຄົນອາຣັບ ຫລື ສູມາຕຣາ ເມື່ອກັບມາຈາກການຢ້ຽມຢາມ ກຸງໄຄໂຣ ຫລື ເຮຈັຊ (cairo, Hejaz) ໄດ້ນຳເອົາຄວາມມຸ່ງຫມາຍອັນແຮງກ້າທີ່ຈະປັບປຸງຟື້ນຟູ ສາສະຫນາ ອິດສະລາມ ຢູ່ໃນສັງຄົມຂອງຕົນ ແລະເພື່ອຈະເຮັດໃຫ້ສາສະຫນາ ອິດສະລາມ ເປັນເຄື່ອງມືທີ່ເຫມາະສົມ ທັງຕອບສະຫນອງຕໍ່ການທ້າທາຍຢູ່ໃນການປ່ຽນແປງ ທາງສັງຄົມເສດຖະກິດ ທີ່ຊາວຕ່າງດ້າວມາຍັດຢູ່ໃຫ້. ໄດ້ມີການປະກາດຄຳສອນ ກ່ຽວກັບຄວາມສາມັກຄີ ອັນເປັນປັດໄຈສຳຄັນຂອງຊຸມຊົນອິດສະລາມ ໂດຍບໍ່ກ່ຽວ ຂ້ອງກັບຜູ້ຄອງອຳນາດ ແລະກະໂຕອຳນາດເອງ, ຄວາມຈຳເປັນທີ່ຕ້ອງສະສ້າງລ້າງສ່ວຍ ອິດສະລາມ ທ້ອງ ຖິ່ນອອກຈາກການສະສົມພອກພູນຮີດຄອງ ທີ່ຂັດຂວາງຄວາມກ້າວຫນ້າ, ແລະຄວາມສະເຫມີພາບອັນຕົ້ນຕໍ ຂອງຊາວມຸດສະລິມ ທຸກຄົນຕໍ່ຫນ້າພະເຈົ້າ, ພວກເຂົາເກີດຄວາມຂັດແຍ່ງທັນທີ ກັບພວກທີ່ຕັ້ງຫມັ້ນຝັງຮາກ ເລິກແລ້ວໃນສັງຄົມມາເລ ໂດຍສະເພາະເຈົ້າປົກຄອງລັດ ທີ່ແຍກອອກໄປແລ້ວ ກັບ ສະຖາບັນສາສະຫນາ ຂອງພວກເຂົາທີ່ພັດທະນາຂຶ້ນມາໃຫມ່ ພາຍໃຕ້ການປົກຄອງຂອງອັງກິດ. ເຖິງແມ່ນວ່າກຳລັງຂອງຂະບວນ ການຕັ້ງຢູ່ສູນກາງໃນເມືອງ ສະເພາະແລ້ວຢູ່ ສິງກະໂປ ກັບ ປີນັງ(ບ່ອນທີ່ຈັບຍາທຳສິນທຳ ສ່ວນບຸກຄົນພິສູດ ຄວາມສາມາດ ດຶງດູດຜູ້ຄົນທີ່ເຂົ້າໄປພົວພັນກັບການແຂ່ງຂັນທາງດ້ານເສດຖະກິດ) ຂະບວນການຍັງໄດ້ຕ້ອນ ຮັບສະມາຊິກໃນກຸ່ມຄູສອນສາສະຫນາ ແລະ ຜູ້ອື່ນໆໃນສັງຄົມຊາວບ້ານຊົນນະບົດ. ການແຂ່ງຂັນກັນ ລະ ຫວ່າງ ພວກປະຕິຮູບ ແລະ ສະຖາບັນທ້ອງຖິ່ນ ບໍ່ຄ່ອຍເທົ່າທຽມກັນ ແຕ່ຂໍ້ຂັດແຍ່ງທີ່ມີຫລາຍດ້ານ ແລະຍືດ ເຍື້ອໄດ້ເຮັດຫນ້າທີ່ ເປັນກຳລັງທີ່ສຳຄັນຫັນໄປສູ່ຄວາມທັນສະໄຫມ ຢູ່ພາຍໃນສັງຄົມ. ໃນລະຍະຍາວຂະບວນ ການປະຕິຮູບ ສາສະຫນາ ບໍ່ສາມາດສ້າງຕັ້ງ ຫລື ນຳເອົາການເຄື່ອນໄຫວຂອງມະຫາຊົນຢູ່ໃນຫມູ່ຊາວມາ ເລຍ, ທຳອິດຍ້ອນການຄັດຄ້ານຈາກສະຖາບັນຕາມປະເພນີ (ທັງທາງສາສະຫນາ ແລະທາງໂລກ) ເຊິ່ງ

ຍັງຍຶດຄອງຄວາມຈົງຮັກພັກດີຂອງປະຊາຊົນຈຳນວນຫລາຍໄວ້ໄດ້ ແລະ ຍິ່ງໄປກວ່ານັ້ນຍ້ອນວ່າ ບັນຫາທີ່ ຂະບວນການສູ້ຍັນຢູ່ນັ້ນ ພວມຖືກແຊງຫນ້າ ຫລື ຍາດແຍ່ງໄປໂດຍລັດທິຊາດນິຍົມຝ່າຍໂລກ ທີ່ຫ່ວງໃຍ ທາງພາກປະຕິບັດຫລາຍກວ່າສັດທາ.

ພ້ອມໆກັນນັ້ນ ໃນກາງຊຸມປີ 1920 ຊາວຫນຸ່ມມາເລ ຈຳນວນຫນຶ່ງ ທີ່ໄດ້ຮັບການຊັກນຳເຂົ້າໄປ ສູ່ແນວຄຶດຕ່ໍຕ້ານ ອານານິຄົມ ໃນວົງການປະຕິຮູບ ສາສະຫນາອິດສະລາມ ຂອງເອຍິບ ກໍໄດ້ອອກສຽງຢ່າງ ເປີດເຜີຍ ເຖິງຄວາມຮູ້ສຶກ ທາງການເມືອງແບບລັດທິຊາດນິຍົມ ອິນໂດເນເຊຍໃຫຍ່ (pan-Indonesia) ໂດຍມີເນື້ອເລື່ອງທາງສາສະຫນາ ແຕ່ຫນ້ອຍດຽວ ຢູ່ໃນຫນັງສືພິມສອງສະບັບ ທີ່ພິມອອກທີ່ກຸງໄຄໂຣ. ເມື່ອ ກັບມາ ມາລາຢູ ພວກເຂົາໄດ້ເຂົ້າຮ່ວມເປັນກຳລັງກັບພວກປັນຍາຊົນຊາວມາເລຍ ຈຳນວນຫລາຍ ທີ່ຮັບ ການສຶກສາແບບທາງໂລກ ເຊິ່ງກຸ່ມນີ້ໄດ້ກາຍເປັນກຸ່ມທີສອງໃນສາມກຸ່ມຊົນຊັ້ນ ນຳໃຫມ່ໃນສັງຄົມມາເລ. ສ່ວນຫລາຍ, ພວກຄູສອນກັບນັກຫນັງສືພິມ ທີ່ເປັນຜົນຜະຫລິດ ຂອງວິທະຍາໄລອົບຮົມ ສຸນລະຕານ ອິຣິສ (Sultan Iris) ຊຶ່ງສ້າງຄູສອນດ້ວຍພາສາທ້ອງຖິ່ນ ແລະ ອີກສອງສະຖາບັນທີ່ຄ້າຍຄືກັນສຳລັບການສຶກສາ ດ້ານເທັກນິກ ແລະການກະສິກຳ, ຊາວມາເລປັນຍາຊົນຜູ້ໄດ້ຮັບອິດທິພົນຢ່າງແຮງຈາກຝ່າຍປີກຊ້າຍຂອງ ຂະບວນການຊາດນິຍົມອິນໂດເນເຊຍ ແລະກໍຫມາຍຫມັ້ນສ້າງມາເລເຊຍ ທີ່ຍິ່ງໃຫຍ່ ຫລື ມະຫາອິນໂດເນເຊຍ ເຊິ່ງອາດກວມລວມເອົາດິນແດນອານານິຄົມທັງຫມົດຂອງອັງກິດ ແລະຂອງໂຮນລັງ. ມີຂໍ້ຍົກເວັ້ນບາງກໍລະນີ ພວກປັນຍາຊົນຜູ້ເຖິງຖອງຖືກດຶງອອກມາຈາກຊົນຊັ້ນຊາວນາ ແລະເຖິງແມ່ນວ່າ ອຸດົມການຂອງພວກເຂົາ ເບິ່ງໃນຫລາຍໆດ້ານ ຍັງສັບສົນຢູ່, ໂດຍອາໄສຫນັງສືພິມພາສາທ້ອງຖິ່ນ ທີ່ມີຖານທີ່ຕັ້ງຢູ່ໃນຕົວເມືອງ, ໄດ້ຕຳ ນິວິຈານພວກຜູ້ນຳຕາມປະເພນີ ແລະພວກຊົນຊັ້ນເສດຖີໃຫມ່ ຜູ້ມີການສຶກສາຜ່ານ ພາສາອັງກິດ (ເຊິ່ງທ່າ ໄດ້ປຽບອັນນີ້ ຂອງພວກເຂົາມັກຖືກອິດສາເລື້ອຍໆ), ຕະຫລອດທັງລັດທິອານາ ນິຄົມອັງກິດນຳ. ຂະບວນການ ໄດ້ດຶງດູດນັກຫນັງສືພິມທີ່ໄດ້ຮັບການສຶກສາເປັນພາສາອັງກິດ ແລະພະນັກງານພົນລະເຮືອນບາງຄົນໃຫ້ເຂົ້າ ຮ່ວມແຕ່ໂຄງການຂອງພວກເຂົາ ບ່ໄດ້ຈັດຕັ້ງເປັນຮູບແບບ ແລະບ່ເຄີຍປະສົບຄວາມສຳເລັດ ເປັນການຈັດຕັ້ງ ອັນຫນຶ່ງອັນດຽວກັບຈັກເທື່ອ. ສະຫະພັນຊາວ ຫນຸ່ມມາເລ (Kesatuan Melayu Muda/ Young Malay Union) ເປັນຫນ່ໍແຫນງແຫ່ງການຈັດຕັ້ງທາງການເມືອງ ສ້າງຕັ້ງຂຶ້ນໂດຍພວກຫົວເຖິງຖອງໃນ ທ້າຍປີ 1938 ໃຊ້ເວລາປີສຸດທ້າຍຫລື ສອງປີກ່ອນເກີດສົງຄາມ ພາຍໃຕ້ການດູແລອັນເຂັ້ມງວດຂອງອັງກິດ. ຂະບວນ ການນີ້ ບ່ເປັນທີ່ໄວ້ເນື້ອເຊື່ອເປັນທີ່ກົວຢ້ານສຳລັບຊາວມາເລ ສ່ວນໃຫຍ່ ຜູ້ເຂົ້າມາສຳຜັດກັບຂະບວນການ ດັ່ງກ່າວ ຍ້ອນທັດສະນະທາງສັງຄົມແບບເຖິງຖອງຮຸນແຮງ ແລະເປ້ົາຫມາຍທາງການເມືອງ ແບບລັດທິ ອິນໂດເນເຊຍໃຫຍ່ (pan-Indonesia). ເຖິງແມ່ນວ່າ ຂະບວນການນີ້ ໄດ້ກາຍເປັນຖານຝຶກອົບຮົມ ອັນມີຄ່າ ສຳລັບພວກຊາດນິຍົມປີກຊ້າຍ ເຊິ່ງຕ່ໍມາພາກັນເຮັດວຽກຢ່າງຫ້າວຫັນ ໃນລະຍະ ການຍຶດຄອງຂອງຍີ່ປຸ່ນ ແລະລຸນຫລັງສົງຄາມ ຢູ່ໃນຂະບວນການທາງການເມືອງຊາວມາເລ ຜູ້ເຖິງຖອງ, ແຕ່ມັນກໍປະລາໄຊໄປກ່ອນ ສົງຄາມອີກຊ້ຳ ແທນທີ່ຈະມີການສະຫນັບສະຫນຸນ ຈາກມະຫາຊົນ ຫລື ສາວົກ ຊາວນາຜູ້ເຂັ້ມແຂງ ຈຸໃດ ຈຸນຶ່ງ.

ຜູ້ນຳຂອງກຸ່ມຊົນຊັ້ນນຳໃຫມ່ທີສາມ ໃນສັງຄົມທັນສະໄຫມມາເລ ສ່ວນຫລາຍແຕກອອກມາຈາກ ພາຍໃນກະໂຕຊົນຊັ້ນປົກຄອງຕາມປະເພນີນັ້ນເອງ, ມີຜູ້ເປັນນັກບໍລິຫານ ທີ່ມີການສຶກສາ ເປັນພາສາອັງກິດ ແລະ ພະນັກງານພົນລະເຮືອນ. ຕາມທາດແທ້ແລ້ວ ກຸ່ມນີ້ຍັງມີພຶດຕິກຳຕ່ໍຕ້ານການອ້າງສິດທິ ໃນການອອກ ສຽງຫລາຍຂຶ້ນໃນຊຸມປີ 1930 ຂອງ ພວກທີ່ຖືກຳເນີດ ໃນທ້ອງຖິ່ນ ທີ່ເປັນຊຸມຊົນຈີນ ແລະອິນເດຽ (ໃນປີ 1931, 31 % ແລະ 21 % ເປັນລະດັບ) ເພື່ອສ່ວນແບ່ງທີ່ ຫລາຍກວ່າ ໃນພາກລັດຖະບານ ການບໍລິຫານ ແລະຊີວິດສາທາລະນະຕາມແບບຊາວມາເລອັງກິດຢ່າງດຽວ. ຄວາມຕົກຕ່ຳທາງເສດຖະກິດໃນຊຸມປີ 1930 ອັນເປັນຜົນມາຈາກນະໂຍບາຍປັບປຸງໃຫມ່ ເຊິ່ງແນໃສ່ທະວີສ່ວນແບ່ງການວ່າຈ້າງວຽກງານຂອງ ລັດ ຖະບານ ສຳລັບຊາວມາເລຂັ້ນນ້ອຍ ຜູ້ມີຖິ່ນຖານຢູ່ໃນເມືອງ ສ້າງຄວາມເຄັ່ງຕຶງຫນັກຫນ່ວງໃຫ້ແກ່ຮູບແບບ ຕາຍຕົວເຄັ່ງຄັດ ຂອງສັງຄົມ ທີ່ຊາວມາເລ ໄດ້ຍຶດຖືປະພຶດປະຕິບັດນຳ. ລູກຈ້າງບ່ແຮ ທັງຊາວຈີນ ອິນເດຽ

ກັບກຳມະກອນກໍ່ສ້າງຫລາຍຄົນ ຖືກໄລ່ອອກຈາກວຽກ ພາກັນໄປຊອກຫາບ່ອນຕັ້ງຫລັກແຫລ່ງໃຫມ່ ໃສ່ດິນ ໃນຖານະນັກກະສິກອນ ເຊິ່ງແຕ່ກອນແມ່ນອາຊີບສະຫງວນໄວ້ສະເພາະຊາວມາເລເທົ່ານັ້ນ. ຊາວມາເລ ໃນຕົວເມືອງ ຜູ້ມີຄວາມມຸ່ງຫວັງສູງ ຜູ້ໄດ້ຮັບການສຶກສາແບບອັງກິດຫລາຍຕື່ມຂຶ້ນແດ່ແລ້ວນັ້ນ ກຳລັງຊ່ວງ ເສັງກັບຄົນອິນເດຍ ແລະຄົນຈີນ ຜູ້ເກີດໃນທ້ອງຖິ່ນ ຍາດແຍ່ງຕຳແຫນ່ງວຽກງານ ເລຂາ ການເງິນ ແລະ ດ້ານວິຊາການ ໃນພາກລັດຖະບານ ໃນເວລາມີການສັບຊ້ອນຄົນອອກການຄັ້ງໃຫຍ່, ພວກຫົວຫນ້າທັງຫລາຍ ຂອງຊາວຈີນ ໃນບໍລິເວນຊ່ອງແຄບ ກັບຄົນອິນເດຽ ຜູ້ເກີດໃນທ້ອງຖິ່ນ ພາກັນໂຕ້ຖຽງຢ່າງແຂງຂັນວ່າ ໃນເຂດ ມາລາຢູໃຫມ່ ຜູ້ຢູ່ປະຈຳຖິ່ນທີ່ບໍ່ແມ່ນມາເລ ກໍຕ້ອງມີສິດເທົ່າທຽມກັນກັບຊາວມາເລ ຢ່າງຫນ້ອຍສຸດ ກໍໃນສັດສ່ວນທີ່ພວກເຂົາ ໄດ້ຊ່ວຍເສີມສ້າງເສດຖະກິດ ຄຳຕອບທີ່ໄດ້ຮັບຕໍ່ຄຳຮຽກຮ້ອງດັ່ງກ່າວ ແມ່ນ "ຖ້າເຈົ້າ ເອົາຜູ້ໃດຜູ້ນຶ່ງມາປຸກເຮືອນໃຫ້ ເມື່ອ ປຸກເຮືອນແລ້ວ ທ່ານຄົງບໍ່ເຊີນໃຫ້ເຂົາຢູ່ນຳຕິເນາະ !". ໃນເວ ລາດຽວກັນ ຊາວຈີນອື່ນໆທີ່ກຳລັງແນມໄປທາງຈີນແຜ່ນດິນໃຫຍ່ຢ່າງຈິງຈັງຫລາຍຂຶ້ນ ດ້ວຍຄວາມພໍໃຈ ໃນເລື່ອງການເມືອງນັ້ນ ກໍໄດ້ໂດດເຂົ້າ ກ່ຽວພັນກັບການເມືອງຂອງກົກມິນຕັ໋ງ (Kuomintang/KMT) ຢູ່ໃນ ກົ່ວດອນມາລາຢູ (ທັ໋ງໆທີ່ມີ ການເນລະເທດ ພວກກົກມິນຕັ໋ງ ໃນປີ 1930 ແລ້ວ) ຫລື ການກໍ່ຕັ້ງ ພັກຄອມມູຍ ນິດມາເລ (1930) ອັນເກືອບເປັນການຈັດຕັ້ງຂອງຊາວຈີນທັ໋ງຫມົດ ທີ່ບໍ່ວ່າຈະເປັນຢ່າງໃດ ກໍຕິດພັນກັບ ອິນໂດເນເຊຍ ແລະຫວຽດນາມ.

ນັບແຕ່ທ້າຍຊຸມປີ 1920 ເປັນຕົ້ນມາ ຊົນຊັ້ນປົກຄອງຕາມປະເພນີຂອງມາເລ, ເຊັ່ນດຽວກັບພວກ ນາຍປົກຄອງ ແລະສະຖາບັນສ້າງຕັ້ງຂຶ້ນໃຫມ່ຂອງພວກເຂົາ ຍັງຄົງເປັນສ່ວນຫນຶ່ງຂອງໂຄງສ້າງເກົ່າ ແລະ ຜູ້ທີ່ຖືກດູດຊຶບເຂົ້າໄປຢູ່ໃນຖັນແຖວ ຂ້າລາຊະການໃຫມ່ຂອງອານານິຄົມ ໄດ້ສະແດງຄວາມ ຫ່ວງໃຍຕໍ່ຖານະ ອັນເສຽປຽບຢ່າງເຫັນໄດ້ຄັກຂອງຊາວມາເລ ໃນໂລກສະໄຫມໃຫມ່, ການມາເຕົ້າຮວມກັນເປັນຄັ້ງຄາວຂອງ ນາຍປົກຄອງ (durbars) ເລີ່ມຂຶ້ນໃນປີ 1927 ໃນຖານະທີ່ເປັນສ່ວນຫນຶ່ງຂອງສັນຍາລັກແຫ່ງການສືບທອດ ອຳນາດຂອງສະຫະພັນຕໍ່ລັດທັ໋ງຫລາຍ, ໂດຍສະເພາະເມື່ອຈະສ້ຽງສຸດ ຊຸມປີ 1930 ມັນໄດ້ກາຍເປັນໂອກາດ ສຳລັບຂໍ້ສະເໜີ ຂອງພວກນາຍປົກຄອງ ເພື່ອຊຸກຍູ້ຊາວຊະວາ ແລະເພື່ອຈຳກັດການອົບພະຍົບເຂົ້າມາຂອງ ຊາວຈີນ ເພື່ອເຮັດໃຫ້ສິດທິເໜືອດິນແດນຂອງຊາວ ມາເລ ຫມັ້ນຄົງ ແລະ ມາດຕະການທັ໋ງຫລາຍທີ່ຄ້າຍ ຄືກັນໃນ ສະພາສະຫະພັນທະລັດ ແລະລັດຖະສະພາ, ສະມາຊິກທີ່ເປັນຊາວມາເລ ບຸກຄົນທີ່ມີຖານະສູງ ທັ໋ງ ຫມົດ ພາຍໃນສະຖາບັນ ຕາມປະເພນີ ໄດ້ໂຕ້ຖຽງເພື່ອໃຫ້ໄດ້ວຽກງານເຮັດຫລາຍຂຶ້ນ ໃນກົ໋ງຈັກບໍລິຫານ ສຳລັບຊາວມາເລ ຜູ້ໄດ້ຮັບການສຶກສາເປັນພາສາອັງກິດ ຫລືເພື່ອໃຫ້ມີການສະຫງວນອາຊີບໃຫ້ຊາວມາເລ ທີ່ເປັນຊາວນາຫລາຍຂຶ້ນ, ແຕ່ພວກເຂົາຖືກຂັດຂວາງ ໃນການສະແດງຄວາມຄຶດເຫັນ ໃນແງ່ຕິຕຽນ ນະໂຍບາຍ ລັດຖະບານໂດຍກົ໋ງໆ ຕາມເຫດຜົນຄວາມເປັນຈິງທີ່ວ່າ ບຸກຄົນເຫລົ່ານັ້ນ ສ່ວນຫລວງຫລາຍ ມີຕຳແຫນ່ງໃນລະບົບລາຊະການຊັ້ນສູງຄືກັນ ມັນເປັນສ່ວນຫນຶ່ງ ເພື່ອຕອບສະຫນອງໃຫ້ທັນກັບ ສະຖານະ ການນັ້ນ, ເພື່ອຈັດໃຫ້ມີການປະຊຸມຕ່າງໆສຳລັບສະແດງຄວາມຄຶດເຫັນ ຂອງ ຊາວມາເລ ແລະເພື່ອຈັດຕັ້ງ "ການຊຸກຍູ້ ທີ່ມີຈຸດປະສົງເຊື່ອງຊ້ອນ" ສຳລັບຜູ້ແທນທັ໋ງຫລາຍຂອງສະພາ ສ້າງຕັ້ງຂຶ້ນໂດຍ ຊົນຊັ້ນສູງ ສ່ວນຫນຶ່ງທີ່ໄດ້ຮັບການສຶກສາເປັນພາສາອັງກິດ, ໃນປີ 1938 ເພື່ອຈັດຕັ້ງສະມາຄົມການເມືອງຂອງ ຊາວ ມາເລ ບົນພື້ນຖານຂອງລັດ. ຝ່າຍຫົວອະນຸລັກນິຍົມຮີດເດີມ ຈົ໋ງຮັກພັກດີ ຕໍ່ຜູ້ປົກຄອງສະແດງອອກຢ່າງ ຟົດຟື້ນພໍໃຈ ເກືອບເທົ່າໆກັບຕໍ່ການປົກຄອງ ແບບອານານິຄົມຂອງອັງກິດ, ແຕ່ໃນປັດຈຸບັນຊ້ຳເປັນກຳແພງ ຕໍ່ຕ້ານການຮຽກຮ້ອງ ອັນສະນັ່ນນັນນອງຂອງຊາວມາເລ ໂດຍກຳເນີດ ແລະ ພວກຊາວຕ່າງດ້າວໃນທ້ອງ ຖິ່ນ, ຂະບວນການ ຂອງສະມາຄົມຊາວມາເລ ຜູກພັນຢູ່ກັບຜູ້ນຳຕາມປະເພນີ ຄືດັ່ງທີ່ມັນເຄີຍເປັນມາ, ຊົນຊັ້ນ ທີ່ຊາວມາເລຈຳນວນຫລາຍ ຍັງຄົງໃຫ້ຄວາມຈົ໋ງຮັກພັກດີ ຢູ່ນັ້ນ ເປັນພຽງການເຄື່ອນໄຫວຕອບກ່ອນເກີດ ສົ໋ງຄາມເທົ່ານັ້ນ ເຊິ່ງເປັນສັນຍານອັນແທ້ຈິງຂອງການ ບໍ່ໄດ້ບັນລຸອັນໃດເລີຍ ໃນດ້ານການສະຫນັບສະຫນຸນ ຈາກມວນຊົນ. ເຖິງແມ່ນວ່າ ມີຄວາມສຳເລັດພຽງເລັກນ້ອຍ ຈາກຄວາມພະຍາຍາມຢູ່ໃນກອງປະຊຸມລະດັບ ຊາດຫລາຍເທື່ອ ເມື່ອປີ 1939 ແລະ 1940 ເພື່ອທ້ອນໂຮມສະມາຄົມຕ່າງໆ ເຂົ້າເປັນອົ໋ງການດຽວ ແລະເຖິ໋ງ

ແມ່ນວ່າຄວາມຈົງຮັກ ພັກດີ ທັງຫລາຍຕໍ່ລັດ ຍັງເຂັ້ມແຂງຢູ່. ການເຕີບໃຫຍ່ຂຶ້ນຂອງລັດທິຊາດ ນິຍົມມາເລ ພາຍຫລັງສົງຄາມນັ້ນ ໃຫ້ວ່າເປັນຍ້ອນບຸນຄຸນອັນລົ້ນເຫລືອ ຂອງການເຄື່ອນໄຫວຂອງສະມາຄົມ ກັບພວກ ຜູ້ນຳ ຂອງສະມາຄົມ ທັງໃນດ້ານອຸດົມການ ແລະການຈັດຕັ້ງ.

# ບົດທີ 31 ປະເທດລາວ ແລະ ກຳປູເຈຍ

ຫລາຍປີກ່ອນສົງຄາມໂລກຄັ້ງທີສອງ ນາຍປົກຄອງຝຣັ່ງໃນລາວ ແລະກຳປູເຈຍ ເຊິ່ງເຄີຍພໍອົກພໍໃຈ ຊື່ນຊົມນຳຄວາມຄຳຮູ້ຄຳຊຽງອັນເຫັນໄດ້ຈະແຈ້ງຂອງ ເຈົ້າຊີວິດ ແລະປະຊາຊົນ ພາຍໃຕ້ການປົກປ້ອງຄຸ້ມ ຄອງຂອງຕົນ ສັງຫອນວ່າ ລາຊະອານາຈັກທັງສອງກຳລັງຫຍັບເຂົ້າໃກ້ຍຸກຟື້ນຟູສິນລະປະວິທະຍາໃດໜຶ່ງ. ເພື່ອຊ່ວຍໃຫ້ເກີດຜົນສຳເລັດໃນເລື່ອງນີ້ ຝຣັ່ງໄດ້ມຸ່ງໃຊ້ຊັບພະຍາກອນຂອງຕົນ ໃສ່ວຽກງານສາທາລະນະ, ໃນ ຂັ້ນຕົ້ນ ແມ່ນການຂະຫຍາຍຖະໜົນທີ່ໃຫ້ໃຊ້ໄດ້ທຸກລະດູການ, ແລະວຽກງານໂຄງການກ່ຽວກັບວັດທະນະທຳ ເຊັ່ນ ການບູລະນະປະຕິສັງຂອນອັງກໍວັດ. ຢູ່ໃນລັດອາລັກຂາທັງສອງນີ້ ຝຣັ່ງ ດຳເນີນການດັ່ງກ່າວ ຜ່ານ ຄອບຄົວເຊື້ອເຈົ້າ ແລະ ພວກຂ້າລາຊະການຊັ້ນສູງ, ຄົນຮຸ່ນໃຫມ່ຂອງຜູ້ນຳລາວ ແລະ ກຳປູເຈຍ ເຊິ່ງເຕີບ ໃຫຍ່ມາພາຍໃຕ້ການປົກຄອງ ຝຣັ່ງ ເຮັດວຽກຢ່າງສະດວກກັບພວກເຂົາຈົນເກືອບບໍ່ມີການຂ້ຽວຂຸ້ນ ໃຫ້ປັບ ປ່ຽນອັນໃດຢູ່ໃນການຄວບຄຸມຂອງຝຣັ່ງ. ຍ້ອນວ່າຄົນພວກນີ້ ບໍ່ມີອຳນາດພຽງພໍທີ່ຈະເຮັດໃຫ້ ຜູ້ໃດຜູ້ໜຶ່ງ ຮູ້ສຶກບາດໜາງ ແລະຍ້ອນວ່າປະຊາຊົນໃນຊົນນະບົດ ສ່ວນຫລາຍບໍ່ມີຄວາມຕື່ນຕົວທາງການເມືອງທັງຢັ່ງ ຢາຍກັນຢູ່ຫ່າງໄກ. ພວກຜູ້ນຳເອງກໍບໍ່ກ້າສ່ຽງຕໍ່ການໃດໆ ຍິ່ງໄປກວ່ານີ້ ເງື່ອນໄຂອັນປະຖົມປະຖານຂອງ ລະບົບການສຶກສາພາຍໃຕ້ການຄວບຄຸມຂອງຝຣັ່ງ ກໍເຮັດໃຫ້ການປາກົດຕົວຂອງຝ່າຍສັດຕູຜູ້ມີຄຸນນະພາບ ຊັກຊ້າໄປ. ທ້າຍທີ່ສຸດ ກົນໄກອັນຈະເປັນເຄື່ອງມືໃຫ້ປະຊາຊົນໃນປະເທດ ສາມາດທ້າທາຍກັບ ການປົກຄອງ ຝຣັ່ງ ກັບຊົນຊັ້ນນຳ ເປັນຕົ້ນວ່າ ໜັງສືພິມທ້ອງຖິ່ນ ການປະຊຸມສະພາຜູ້ແທນລາສະດອນ ແລະສະມາຄົມ ອາສາສະໝັກ ທັງຫລາຍ ເກືອບບໍ່ມີເລີຍ ຢູ່ໃນໝູ່ຄົນລາວ ແລະ ກຳປູເຈຍ.

ຢູ່ປະເທດໃນອາລັກຂາທັງສອງ ນັ້ນ ເຫດການສະໄໝສົງຄາມໂລກຄັ້ງທີສອງ ໄດ້ມີສ່ວນສຳຄັນໃນ ການກໍ່ໃຫ້ເກີດ ຄວາມຮູ້ສຶກຊາດນິຍົມ ແລະອົງການຈັດຕັ້ງ. ນະໂຍບາຍ ຝຣັ່ງ ຕໍ່ລາວ ແລະ ກຳປູເຈຍ ຖືກບີບ ໃຫ້ເປັນໄປໃນທາງບວກ ຍ້ອນສົງຄາມອິນໂດຈີນ ປີ 1940-1941 ເມື່ອການເສຍດິນແດນຈຳນວນສຳຄັນເຕີບ ໃຫ້ແກ່ປະເທດໄທ ຈຳໃຫ້ຝຣັ່ງ ຕ້ອງເຈລະຈາຄືນໃຫມ່ ກ່ຽວກັບຄວາມຈົງຮັກພັກດີຂອງປະເທດໃນອາລັກຂາ ແບບລາຊາທິປະໄຕ. ຢູ່ປະເທດລາວ ການເຈລະຈາໃຫມ່ເກີດຂຶ້ນ ໃນຮູບການຂອງການສົ່ງເສີມຄວາມເຂັ້ມ ແຂງ ແລະຂະຫຍາຍອຳນາດຂອງ ພະເຈົ້າຊີວິດຫລວງພະບາງ; ສ່ວນຢູ່ກຳປູເຈຍ ບ່ອນເຈົ້ານະໂລດົມ ສີຫະນຸ ໄດ້ຮັບການສະຖາປະນາໃຫມ່ ຝຣັ່ງໄດ້ພິຈາລະນາເຫັນວ່າ ເປັນຜູ້ຕີຫລົບຫົບໄດ້ຫລາຍກວ່າ ເຈົ້າຊີວິດ ສີສະ ຫວ່າງວົງ ຂອງລາວ, ນະໂຍບາຍໃຫມ່ຈຶ່ງເກີດຂຶ້ນໃນຮູບແບບຂອງການທະວີທັດສະນະວິໄສ ໃຫ້ແກ່ເຈົ້າຊີວິດ ໃນການເບິ່ງແຍງປະຊາຊົນຂອງພະອົງ.

## ປະເທດລາວ

ໃນຄວາມໝາຍຢ່າງເປັນທາງການ ປະເທດລາວ ຖືກຈັດເຂົ້າໄປຢູ່ໃນກຸ່ມປະເທດ ອິນໂດຈີນ ຝຣັ່ງ ອັນກວ້າງຂວາງ ມີປະຊາກອນ ແຕ່ 7.3% ຂອງປະຊາກອນລວມ ແລະ ມີລາຍຮັບຈາກການຄ້າ ກັບຕ່າງ ປະເທດແຕ່ 1% ເທົ່ານັ້ນ, ມີພະນັກງານຝຣັ່ງຝ່າຍບໍລິຫານ ແຕ່ 167 ຄົນ. ຍິ່ງໄປກວ່ານີ້ ກິດຈະກຳທາງ ເສດຖະກິດ ແລະການປົກຄອງ ສ່ວນຫລາຍກໍແມ່ນຊາວຕ່າງປະເທດເປັນຜູ້ດຳເນີນການ ຄື ຊາວຫວຽດນາມ ຕ່າງດ້າວ ທີ່ເຂົ້າມາເປັນຮອດ 3/5 ຂອງປະຊາກອນໃນຕົວເມືອງ ທັງຫມົດ ເມື່ອປີ 1943 ທີ່ມີຢູ່ 50.000 ຄົນ. ເຖິງຢ່າງໃດກໍດີ ຄຳໝັ້ນສັນຍາທາງການເມືອງ ແລະທາງຄວາມຮູ້ສຶກ ຂອງຝຣັ່ງ ຕໍ່ປະເທດລາວ ມີຫລາຍ ກວ່າທີ່ດັດຊະນີປະລິມານຊີ້ບອກ, ມັນແມ່ນຍ້ອນສະພາບການຂາດເຂີນຄວາມຊ່ວຍເຫລືອ ທີ່ເຮັດໃຫ້ຄົນຊັ້ນສູງ ລາວ ແຕກແຍກກັນໃນລະຍະທ້າຍໆ ຂອງສະຕະວັດທີ 19 ແລະ ບາງທີ ອາດຂຶ້ນຢູ່ກັບຄວາມຮູ້ສຶກ ຂອງຝຣັ່ງ

ທີ່ເຫັນວ່າ ຫລາຍແນວຂຶ້ນນຳຄົນລາວຫລາຍກວ່າ ທີ່ ຝຣັ່ງເອງ ຈະສາມາດເຮັດໄດ້ສຳລັບພວກເຂົາ ຍ້ອນວ່າ ງົບປະມານໃຫ້ອານານິຄົມ ກໍຈຳກັດ ແລະ ອັນຫນຶ່ງອີກກໍແມ່ນ ອຳນາດຈຳກັດນັ້ນເອງ.

ນອກຈາກສົງຄົມທ້ອງຖິ່ນ ໃນຢູ່ແຕ່ລະເມືອງແລ້ວ ກໍບໍ່ມີສັງຄົມລາວແບບໃດອີກ ເມື່ອຝຣັ່ງເຂົ້າມາ ຄວບຄຸມລາວ ໃນປີ 1893. ສັງຄົມຕົກຢູ່ໃນລະບົບເສຽສ່ວຍ ຢູ່ພາກເໜືອສຸດຂອງປະເທດແມ່ນ ການປົກຄອງ ຂອງຄອບຄົວລາຊະວົງຫລວງພະບາງ ທີ່ພະຍາຍາມດ້ວຍຄວາມລຳບາກເພື່ອປ້ອງກັນ ພວກໂຈນຈີນຫໍ້ ທີ່ເຂົ້າມາຮຸກຮານປຸ້ນຈີ້ ທັງນີ້ເພື່ອປົກປ້ອງອະທິປະໄຕ ຢູ່ເໜືອປະເທດສະລາດໃກ້ຄຽງ ແລະ ເພື່ອຮັກສາ ສິດເປັນ ເຈົ້າປົກຄອງຕົນເອງ ໃນການປະເຊີນໜ້າກັບການແຊກແຊງຂອງສະຫຍາມ ທີ່ນັບມື້ນັບຫລາຍຂຶ້ນ. ຢູ່ພາກໃຕ້ສຸດ ຄື ທີ່ຈຳປາສັກ ກໍມີຕະກູນເຈົ້າປົກຄອງຄອບຄົວໜຶ່ງທີ່ໄດ້ຮັບການຍອມຮັບ ຈາກເຈົ້າຊີວິດ ບາງກອກ ໃນຖານະເປັນເຈົ້າປົກຄອງແຂວງ ກໍຍັງຮັກສາຫົວເມືອງຈຳນວນໜຶ່ງ ທີ່ຢູ່ໃກ້ໆທາງກ້ຳເໜືອ ແລະຕາເວັນອອກ ແຕ່ບໍ່ໜັ້ນຫນຽວເທົ່າໃດ. ດ້ວຍຄວາມພ້ອມໃຈ ຂອງຂ້າລາຊະການ ແລະເຈົ້າປະເທດ ສະລາດ ພວກເຂົາໄດ້ຍົກຕົນເອງຂຶ້ນເປັນເຈົ້າປົກຄອງ, ຖານະການປົກຄອງຂອງຝຣັ່ງ ຢູ່ລາວ ຕັ້ງຢູ່ບົນພື້ນ ຖານແຫ່ງຄວາມ ສຳພັນແບບສ່ວນຕົວ ລະຫວ່າງ ພະເຈົ້າອຸ່ນຄຳ (1872 -1894) ແຫ່ງຫລວງພະບາງ ແລະກົງສຸນ ຝຣັ່ງ ຊື່ ໂອກຸສ ປາວີ (Auguste Pavie) ແລະຕັ້ງຢູ່ບົນ ສົນທິສັນຍາຝຣັ່ງ-ສະຫຍາມ ປີ 1893 ເຊິ່ງເປັນເຫດໃຫ້ ສະຫຍາມຕ້ອງຍົກ ດິນແດນ ທາງຝັ່ງຂວາ (ຕາເວັນອອກ) ຂອງແມ່ນ້ຳຂອງໃຫ້ແກ່ຝຣັ່ງ, ບໍ່ມີຂໍ້ຕົກລົງທີ່ ເປັນລາຍລັກອັກສອນ ລະຫວ່າງ ຝຣັ່ງ ແລະ ລາວ ກ່ຽວກັບຄວາມສຳພັນລະຫວ່າງສອງ ຝ່າຍ. ພວກຝຣັ່ງ ມີຄວາມຫຍຸ້ງຍາກໃຈພຽງເລັກນ້ອຍ ໃນການປະຕິບັດວຽກງານບົນພື້ນຖານຂອງ ສະຖານະການອັນຖືກຕ້ອງ ຕາມກົດໝາຍລະຍະສັ້ນໆ ຍ້ອນວ່າພວກເຂົາພຽງແຕ່ສະແດງບົດບາດ ຂອງຜູ້ມີ ອຳນາດອະທິປະໄຕທ່ໍນັ້ນ ໃນກໍລະນີນີ້ ເຮັດອັນໃດກໍຕ້ອງອ້າງວ່າ ແມ່ນໃນນາມແຫ່ງລາຊະສຳນັກເມືອງເໜ້ ສຳລັບຊົນຊັ້ນສູງລາວ ພວກເຂົາ ພໍໃຈນຳກົດລະບຽບ, ຄວາມໜັ້ນຄົງ ແລະຄວາມຮັ່ງມີສີສຸກ ຊຶ່ງສູນເສຍໄປ ນັບຕັ້ງແຕ່ສ້ຽງສຸດ ສະຕະວັດທີ 17 ມາ, ໃນການຍອມຮັບເອົາການປົກຄອງຂອງຝຣັ່ງ ພວກເຂົາໄດ້ຮັບ ຜົນປະໂຫຍດ ແບບ "ທັນສະໄໝ" ຈາກມັນ ເຊັ່ນວ່າ ການສຶກສາ ແລະອຳນາດໃນການປົກຄອງ ບໍລິຫານ ທີ່ສູງຂຶ້ນກວ່າເກົ່າ.

ໃນອີກຄວາມຫມາຍໜຶ່ງ ຝຣັ່ງ ໄດ້ບີບຮັດ ລາວ ໃຫ້ຄົງສະຖານະພາບແບບເດີມໄວ້ - ໂດຍສະເພາະ ດ້ານການຮັກສາອຳນາດ ແລະ ສິດທິພິເສດຂອງລາຊະວົງທີ່ປົກຄອງຫລວງພະບາງ ແລະແຂວງທີ່ຂຶ້ນກັບ ແຕ່ພວກເຂົາໄດ້ເຮັດຫລາຍກວ່ານັ້ນ ຄື ຝຣັ່ງໄດ້ປະກາດ ພາລະກິດຂອງຕົນທີ່ຕ້ອງ "ສ້າງພວກຊົນຊັ້ນສູງ ຂຶ້ນຈຳນວນໜຶ່ງໃຫ້ພຽງພໍ ແລະມີຄວາມຕື່ນຕົວ... ເພື່ອສ້າງຈິດສຳນຶກແຫ່ງຊາດຂຶ້ນ" ຄວາມພະຍາຍາມນັ້ນ ເປັນວຽກງານອັນລະອຽດອ່ອນ ໃນການໃຫ້ການສຶກສາ ແກ່ພວກເຈົ້ານາຍ ແລະຊົນຊັ້ນນຳ ໃນລັດຖະບານ ຕາມຄ່ານິຍົມຂອງ ຝຣັ່ງ ແຕ່ຜັດບໍ່ເອົາໃຈໃສ່ຕໍ່ປະເພນີລາວເລີຍ. ຜົນການເມືອງຂອງມັນ ແມ່ນເປັນການເສີມ ກຳລັງໃຫ້ແກ່ລະບອບລາຊາທິປະໄຕ ໃຫ້ເປັນສະຖາບັນໜຶ່ງ ແລະເສີມສ້າງການກະຈາຍອຳນາດ ທາງການ ເມືອງທີ່ມີຢູ່ແລ້ວໃນປະເທດລາວ ພ້ອມທັງທະວີລະດັບການຂຶ້ນກັບອຳນາດຝຣັ່ງ ໃນໝູ່ຊົນຊັ້ນສູງ.

ປະຫວັດສາດການເມືອງ ລາວ ພາຍໃຕ້ການປົກຄອງ ຝຣັ່ງ ຈົນຮອດມື້ ຍີ່ປຸ່ນ ຍຶດອຳນາດ ໃນເດືອນ ມີນາ 1945 ໃນຂັ້ນຕົ້ນ ເປັນໄປຕາມຫລັກການ. ການປົກຄອງຂອງ ຝຣັ່ງ ຂະຫຍາຍ ອອກເຖິງພາກໃຕ້ ໂດຍການແຕ່ງຕັ້ງກອມມິດຊຸ ປະຈຳຢູ່ 7 ແຂວງສຳຄັນ ເພື່ອບັນຊາການປົກຄອງ, ສ່ວນອີກ 6 ຄົນ ແຕ່ງຕັ້ງ ໃຫ້ປະຈຳການໃນແຂວງໃຫຍ່ ຂອງອານາຈັກຫລວງພະບາງ. ເຖິງແນວໃດກໍດີ ການປົກຄອງພາຍໃນທ້ອງ ຖິ່ນ ບໍ່ໄດ້ຖືກແຕະຕ້ອງແຊກແຊງ ແລະແນ່ນອນໄດ້ຮັບການເສີມສ້າງໃຫ້ເຂັ້ມແຂງ ດ້ວຍການສ້າງຕັ້ງປະເທດ ລາວເອກະພາບໃນປີ 1899 (ດິນລາວ ທີ່ຢູ່ຄົນລະຟາກແມ່ນ້ຳຂອງ ກັບ ຫລວງພະບາງ ແລະ ບາງສ່ວນທີ່ ເຫລືອຂອງຈຳປາສັກ ໄດ້ຖືກຍົກໃຫ້ ກັບ ສະຫຍາມ ຕາມສົນທິສັນຍາ ປີ 1902 ແລະ 1904) ພາຍໃຕ້ອຳນາດ ໜ້າທີ່ຂອງ ກອມມິດຊຸໃຫຍ່ ປະຈຳຢູ່ນະຄອນວຽງຈັນ ການມີສ່ວນເຂົ້າຮ່ວມນັບມື້ນັບຫລາຍຂຶ້ນ ຂອງຊົນ ຊັ້ນສູງລາວ ໃນຄະນະລັດຖະບານ ໄດ້ຮັບການກຳນົດໄວ້ເປັນລະບຽບ ຍ້ອນການສ້າງຕັ້ງສະພາທີ່ປຶກສາປະຈຳ

ແຂວງຂຶ້ນຢ່ຳງເປັນທຳງການ ໃນປີ 1920, ເພື່ອໃຫ້ຄຳແນະນຳແກ່ລັດຖະບຳນຝຣັ່ງກ່ຽວກັບ" ຄຳຖຳມທັງ ຫມົດ ທີ່ວ່ຳດ້ວຍຜົນປະໂຫຍດທຳງເສດຖະກິດ ແລະ ສັງຄົມ... ທີ່ສະເໜີເຂົ້ຳສູ່ສະພຳທີ່ເປີກສຳ ແລະໂດຍສະ ເພຳະຢ່ຳງຍິ່ງ ແຜນງຳນດ້ຳນໂຍທຳທັງຫລຳຍ ສຳລັບປີຕ່ຳໆມຳ" ບໍ່ດົນ ຫລັງຈຳກນັ້ນ ສະພຳລຳຊະມຸນຕີໃນ ຫລວງພະບຳງ ເຊິ່ງຝຣັ່ງພະຍຳຍຳມຍຸບເລີກໄປໃນປີ 1915 ແຕ່ບໍ່ສຳເລັດນັ້ນ ກໍໄດ້ຮັບກຳນຈັດຕັ້ງຄືນໃຫມ່ ຕຳມສຳຍໜ້ຳທີ່ບຸກຄົນລະດັບສູງສຳມທ່ຳນ ໄດ້ຮັບກຳນແຕ່ງຕັ້ງ ໃຫ້ຮັບຜິດຊອບ ກະຊວງພຳຍໃນ, ຍຸຕິທຳ, ສຶກສຳ ແລະສຳສະໜບຳ, ກຳນເງິນ ໂຍທຳທິກຳນ ກຳນຄ້ຳ ແລະກຳນກະສິກຳ.

ສຳລັບໜ້ຳທີ່ກຳນບໍລິຫຳນແບບນີ້ ສະມຳຊິກຊົນຊັ້ນສູງຂອງລຳວ ຄື ທັງກະສັດ ແລະ ພະບໍລົມ ວົງສຳນຸວົງ ຫລວງພະບຳງ ແລະ ຄອບຄົວພວກເຈ້ຳແຂວງ ຕ່ຳງກໍໄດ້ຮັບກຳນສຶກສຳແບບຝຣັ່ງຢ່ຳງເຕັມ ຂີດ ໂດຍເລີ່ມຕົ້ນຈຳກວຽງຈັນ ແລ້ວໄປຕໍ່ໂຮງຮຽນມັດທະຍົມທີ່ ຮຳໂນຍ ໄຊ່ງອນ ຫລື ປຳຣີ ກ່ອນເຂົ້ຳມະຫຳ ວິທະຍຳໄລ ຫລືໂຮງຮຽນເຕັກນິກໃນປະເທດຝຣັ່ງ. ພະເຈ້ຳສີສະຫວ່ຳງວົງ(1904- 1959)ແຫ່ງຫລວງພະບຳງ ໃຊ້ເວລຳໜຶ່ງປີ ຢູ່ປະເທດຝຣັ່ງ ທຳອິດ ຄືປີ 1900-1901 ແລະ ບັນດຳພະໂອລົດ ພະນັດດຳ (ລູກຊຳຍ ຫລຳນ ຊຳຍ) ຈຳນວນຫລຳຍກໍໄດ້ຕິດຕຳມພະອົງໄປຢູ່ຫັ້ນ. ສິ່ງຊີ້ບອກຢ່ຳງໜຶ່ງກ່ຽວກັບຂະໜຳດ ແລະສ່ວນປະ ກອບຂອງຊົນຊັ້ນສູງຂອງລຳວ ອຳດຄົ້ນຫຳໄດ້ຈຳກຄວຳມເປັນຈິງທີ່ວ່ຳ ນັກກຳນເມືອງຊັ້ນນຳຂອງລຳວ ທີ່ໄດ້ ຮັບກຳນສຶກສຳ ໃນລະຫວ່ຳງທ້ຳຍໆ ປີ 1945 ນັ້ນ ສຳມຳດສະແດງອອກເປັນຜັງເສັ້ນສືບເຊື້ອສຳຍຄ່ຽວ ປະກອບດ້ວຍເຊື້ອສຳຍທຳງພໍ່ຂອງ ພະເຈ້ຳມະຫຳຊີວິດຫລວງພະບຳງ ກັບສຳຍວັງຫລັງ ເຈ້ຳອຸປະຮຳດ ບຸນຄົງ (ເຊິ່ງເຈ້ຳເພັດຊະຮຳດ ອົງເປັນໂອລົດ ຖືກປະຕິເສດ ບໍ່ໃຫ້ສືບລຳຊະສົມບັດ ໃນປີ 1914) ຊຶ່ງໄດ້ຮັບ ກຳນສຶກສຳມຳທຳງດ້ຳນວິສະວະກຳ ແລະກົດໝຳຍ. ຊຳວໜຸ່ມເຫລ່ຳນີ້ໄດ້ເຂົ້ຳເຮັດວຽກໃນຕຳແໜ່ງວິຊຳ ກຳນເຕັກນິກ ແລະ ມີໜ້ອຍຄົນໃນວຽກງຳນບໍລິຫຳນທົ່ວເຂດອຳນຳນິຄົມຝຣັ່ງ. ຕົວຢ່ຳງ ສະເດັດເຈ້ຳ ສຸວັນນະພູມມຳ ໃນນຳມວິສະວະກອນໜຸ່ມ ໄດ້ເປັນຜູ້ນຳພຳ ກຳນປະຕິສັງຂອນວັດໜ້ຳພະແກ້ວ ເຊິ່ງເປັນສຳສະ ນະ ສະຖຳນ ແຫ່ງສຳຄັນ ລະຫວ່ຳງປີ 1937 ແລະ 1940 ສ່ວນສະເດັດເຈ້ຳສຸພຳນະວົງ ໄດ້ຮັບກຳນຊຸກຍູ້ ໄປເຮັດວຽກກ່ໍສ້ຳງຂົວ ທີ່ຫວຽດນຳມ.

ທ່ຳທີຂອງຝຣັ່ງ ຕ່ໍວັດທະນະທຳລຳວນັ້ນ ມີທັງຈຸດດີຈຸດອ່ອນ. ຈຶ່ງເປັນທຳມະດຳທີ່ຄວຳມສົນໃຈ ໃນວັດທະນະທຳທັງແບບດັ້ງເດີມ ແລະແບບສະໄໝມໃຫມ ໄດ້ເຮັດໃຫ້ຊົນຊັ້ນນຳລຳວ ຫັນມຳນິຍົມຊົມຊອບ ໜັງສືພິມ ວິທະຍຸ ປຶ້ມອ່ຳນຂອງໄທ ເຊິ່ງທັງໝົດໃຊ້ພຳສຳທີ່ພວກເຂົ້ຳເຂົ້ຳໃຈໄດ້ ແລະ ພະສົງລຳວ ຈຳນວນ ຫລຳຍ ກໍໄດ້ມຳສຶກສຳດ້ຳນສຳສະໜບຳພຸດລະດັບສູງຕ່ໍໃນສະໜຍຳມ. ເພື່ອຕ້ຳນທຳນ ກັບກຳນ ດຶງດູດນັ້ນ ພະລຳຊະອຳນຳຈັກລຳວ ຈຶ່ງໄດ້ເຂົ້ຳຮ່ວມໃນກຳນກ່ໍຕັ້ງສະຖຳບັນພຸດທະສຳສະໜບຳ ທີ່ພະນົມເປັນໃນປີ 1930 (ຕ່ໍມຳປະເທດລຳວ ຈຶ່ງໄດ້ສ້ຳງຕັ້ງສະຖຳບັນຂອງຕົນເອງຂຶ້ນໃນປີ1937) ແລະ ຝຣັ່ງກໍໄດ້ອອກໜັງສືພິມລຳຍ ອຳທິດສະບັບໜຶ່ງ ແລະຕັ້ງສະຖຳນີວິທະຍຸກະຈຳຍສຽງຂຶ້ນໃນ ປີ 1941. ນັ້ນແມ່ນກຳນລິເລີ່ມຂອງຊົນຊັ້ນ ນຳຂອງລຳວ. ເຖິງຢ່ຳງໃດກໍດີ ໄດ້ມີຄວຳມພະຍຳຍຳມຍັບຍັ້ງວັດທະນະທຳໄທ ດ້ວຍກຳນ ຂຽນພຳສຳລຳວ ດ້ວຍຕົວອັກສອນໂຣມັນໃນປີ 1941 ທີ່ນຳເຂົ້ຳມຳປ່ຽນແທນ ອັກສອນລຳວ (ທີ່ເຂົ້ຳໃຈວ່ຳ) ແມ່ນອັກສອນໄທ ແບບໜຶ່ງເຊິ່ງໃຊ້ກັນມຳແຕ່ກ່ອນ. ຄວຳມພະຍຳຍຳມ ດັ່ງກ່ຳວ ບໍ່ສຳເລັດຜົນແຕ່ຢ່ຳງໃດ ຊ້ຳຍັງໄດ້ເປັນ ສຳເຫດຂອງເຫດກຳນ ກຳນເມືອງໂດຍກົງ.

ຫລັງຈຳກກຳນຫລີ້ມຈົມຂອງປະເທດ ຝຣັ່ງ ໃນປີ 1940 ຝຣັ່ງ ແລະ ລຳວ ຕ່ຳງກໍຊ່ອຍກັນບໍ່ໄດ້ ໃນ ກຳນປະເຊີນໜ້ຳກັບລັດທິໄທໃຫຍ່ (pan -Thai) ທີ່ອ້ຳງສິດເໜືອດິນແດນແລະຄຳປະກຳດຂອງ ລັດຖະບຳນ ຫລວງພິບູນ ໃນປະເທດໄທ. ເມື່ອສົງຄຳມອິນໂດຈີນ ຍຸຕິລົງ ໃນປີ 1940-1941 ປະເທດຝຣັ່ງ ຖືກບັງຄັບໃຫ້ ຍົກດິນແດນບຳງແຂວງຂອງລຳວ ທີ່ຢູ່ຝັ່ງຂວຳຂອງແມ່ນ້ຳຂອງ ຕ່ໍໜ້ຳຫລວງພະບຳງ ແລະປຳກເຊ ໃຫ້ແກ່ ໄທ. ດິນແດນສ່ວນນີ້ ແຕ່ກ່ອນແມ່ນແຂວງໄຊຍະບຸລີ. ນັ້ນແມ່ນຄວຳມເຈັບຊ້ຳສດແສບ ເພຳະວ່ຳແມ່ນສະຖຳນ ທີ່ສັກສິດ ປ່ຳຊ້ຳຂອງຕະກຸນລຳຊະວົງຫລວງພະບຳງ. ຍ້ອນກຳນສູນເສຽຄັ້ງນີ້ ປະເທດຝຣັ່ງ ເຊິ່ງເປັນມະຫຳ ອຳນຳດ ປົກປ້ອງປະເທດລຳວ ຕ້ອງເປັນຝ່ຳຍຮັບຜິດຊອບ. ປະຕິກິລິຍຳຕ່ໍຕ້ຳນວັດທະນະທຳໄທ ໃນຂັ້ນຕ່ໍມຳ

ຈຶ່ງແມ່ນຄວາມພະຍາຍາມຂອງ ຝຣັ່ງ ໃນການປົວແປງກອບກູ້ຊື່ສຽງທີ່ເສຽໄປ ຍ້ອນຍົກດິນໃຫ້ໄທ. ແຂວງ ຊຽງຂວາງ ວຽງຈັນ ແລະ ນ້ຳທາ ໃນປັດຈຸບັນ ເຊິ່ງເປັນເຂດ ທີ່ເຈົ້າຊີວິດ ບໍ່ໄດ້ຄຸ້ມຄອງ ນັບແຕ່ສະຕະວັດທີ 17 ມາ ໄດ້ຖືກໂອນ ອອກຈາກການປົກຄອງ ໂດຍກົງຂອງ ຝຣັ່ງ ມາໃຫ້ເຈົ້າຊີວິດ ຍິ່ງໄປກວ່ານີ້ ໃນທີ່ສຸດ ສົນທິສັນຍາທາງການສະບັບຫນຶ່ງ ທີ່ສະຖາປະນາລາວ ໃຫ້ເປັນລັດໃນອາລັກຂາ ກໍໄດ້ເຮັດສຳເລັດລົງ ໃຊ້ ແທນຂໍ້ຕົກລົງ ທີ່ບໍ່ເປັນທາງການກັບ ທ່ານປາວີ ນັ້ນ ແລະ ຂໍ້ຕົກລົງທີ່ບໍ່ເປັນທາງການທູດ ກັບອ້າຫລວງໃຫຍ ແຫ່ງອິນໂດຈີນ ທີ່ໄດ້ຕົກລົງກັນ ເມື່ອເລີ່ມຕົ້ນການປົກຄອງຂອງຝຣັ່ງ. ມີການສ້າງຕັ້ງລັດຖະບານຊຸດໃຫມ່ ມອບໃຫ້ເຈົ້າຊີວິດ ພ້ອມດ້ວຍຕຳແຫນ່ງສຳຄັນ 5 ຕຳແຫນ່ງ. ເຈົ້າສະຫວ່າງວັດທະນາ ໄດ້ຮັບການສະຖາປະ ນາ ເປັນອົງມຸງກຸດ ແລະໃນທີ່ສຸດ ສະເດັດເຈົ້າເພັດຊະຣາດ ກໍໄດ້ຮັບຕຳແຫນ່ງເປັນອຸປະຣາດ ສືບຕໍ່ຕຳແຫນ່ງ ພະບິດາຂອງພະອົງ ແລະທັງໄດ້ເປັນນາຍົກນຳ. ອີກຄັ້ງຫນຶ່ງທີ່ເຊື້ອສາຍຂອງສອງຕະກຸນ ຄື ວັງຫນ້າ ແລະ ວັງຫລັງ ໄດ້ຖືກດຶງເຂົ້າມາຢູ່ຮ່ວມກັນ.ຢ່າງໃດກໍດີ ພວກຊົນຊັ້ນສູງ ເຖິງແມ່ນວ່າມີຈຳນວນຫນ້ອຍຢູ່ແລ້ວ ແຕ່ກໍຍັງແຕກແຍກກັນອີກຢູ່ ດ້ວຍຖານະຕຳແຫນ່ງອັນບໍ່ຈະແຈ້ງຂອງຝ່າຍຈຳປາສັກ ທາງພາກໃຕ້ ດັ່ງດຽວ ກັນກັບທີ່ຝ່າຍລາຊະສຳນັກ ກັບຝ່າຍຝຣັ່ງ ຖືກແບ່ງແຍກກັນໃນດ້ານການບໍລິຫານ. ສະມາຊິກຂອງຊົນຊັ້ນ ສູງບາງຄົນ ເຊິ່ງຕື່ນຕົວ ສູງທາງດ້ານການເມືອງ ຍ້ອນເຫດການປີ1940-1941 ແລະ ຜົນສະທ້ອນທີ່ຕິດຕາມ ມາ ພາໃຫ້ພວກເຂົາຄຶດຫາອະນາຄົດຂອງປະເທດ ຖ້າວ່າເມື່ອໃດ ຝຣັ່ງບໍ່ໄດ້ຢູ່ນຳແລ້ວ. ພະນັກງານ ຝຣັ່ງຄົນ ຫນຶ່ງຢູ່ຫລວງພະບາງ ຮູ້ເລື່ອງນີ້ເຂົ້າ ໄດ້ບອກເຕືອນລັດຖະບານຂອງຕົນວ່າ "ລະວັງ ເຈົ້າຊາຍພະອົງນີ້ (ເຈົ້າເພັດຊະຣາດ) ເມື່ອສົງຄາມຍຸຕິລົງ ເພາະວ່າພະອົງຈະໄປຮ່ວມມືກັບປະເທດໄທ ເພື່ອສະແຫວງຫາ ເອກະລາດ".

## ປະເທດກຳປູເຈຍ

ກ່ຽວກັບລັດທິຊາດນິຍົມໃນ ກຳປູເຈຍນັ້ນ ການສ້າງສະຖາບັນທີ່ສຳຄັນທີ່ສຸດຂຶ້ນໃຫມ່ ໃນຊຸມປີ ກ່ອນ ເກີດສົງຄາມໂລກຄັ້ງທີ 2 ແມ່ນສະຖາບັນພຸດທະສາສະຫນາ ທີ່ສ້າງຕັ້ງຂຶ້ນຢູ່ ພະນົມເປັນ ໃນປີ1930 ພາຍໃຕ້ ການອຸປະກາລະຮ່ວມກັນຂອງເຈົ້າຊີວິດ ກຳປູເຈຍ ແລະ ເຈົ້າຊີວິດຫລວງພະບາງໃນລາວ ກັບ ຝຣັ່ງ. ສະຖາ ບັນນີ້ ມີເປົ້າຫມາຍສົ່ງເສີມການສຶກສາພະພຸດທະສາສະຫນາ ໃນທົ່ວປະເທດກຳປູເຈຍ ແລະລາວ, ສະຖາບັນ ນີ້ ມີຜົນເຮັດໃຫ້ ເຈົ້າຊີວິດກຳປູເຈຍ ແລະ ປະຊາຊົນຂອງພະອົງ ມີຄວາມສຳພັນກັນດີຂຶ້ນ. ຈາກການໃຊ້ ອຸປະກອນການພິມທີ່ ຝຣັ່ງຈັດສະຫນອງໃຫ້ ບໍ່ດົນ ສະຖາບັນພະພຸດທະສາສະຫນາ ກໍເລີ່ມພິມຕຳລາ ປຶ້ມ ສອນທາງພຸດທະສາສະຫນາ ເປັນພາສາປາລີ ແລະຂະເຫມນ (ກຳປູເຈຍ) ອອກເຜີຍແຜ່, ເອກະສານສຳລັບ ກວດກາປຽບທຽບ ຖືກສົ່ງມາຈາກຫໍໄຕແຂວງຕ່າງໆ. ຜົນງານດ້ານການພິມທີ່ອອກມາຂອງສະຖາບັນ ເຖິງວ່າບໍ່ຍິ່ງໃຫຍ່ຫລວງຫລາຍ ດ້ານມາດຕະຖານ ແຕ່ກໍຍັງມີຫລາຍກວ່າສິ່ງທີ່ເຄີຍມີມາແຕ່ກ່ອນ. ເມື່ອຊື່ ສຽງຂອງສະຖາບັນ ໂດ່ງດັງຂຶ້ນ ດ້ວຍການຈັດກອງປະຊຸມເລື້ອຍໆ ສະຖາບັນ ກໍໄດ້ກາຍເປັນຈຸດເຕົ້າໂຮມ ຂອງຊົນຊັ້ນປັນຍາຊົນທີ່ພວມ ກໍ່ຕົວຂຶ້ນ. ສອນ ງອກ ທັນ (Son Ngoc Thanh) ບັນນາລັກຂອງສະຖາບັນ ເກີດ ຢູ່ ຫວຽດນາມໃຕ້ ມີພໍ່ແມ່ ຫວຽດນາມ - ກຳປູເຈຍ ໄດ້ກໍ່ຕັ້ງຫນັງສືພິມລາຍວັນ ພາສາກຳປູເຈຍ ຊື່" ນະຄະ ຣະວັຕຕາ (ອັງກໍວັດ) ໃນປີ 1936. ບໍ່ເທົ່ງນານ ຫລັງຈາກນັ້ນ ຄວາມກົດດັນຈາກເຫດການຕ່າງໆເຊັ່ນ ສົງຄາມກັບປະເທດໄທລະຫວ່າງປີ 1940-1941 ແລະ ການອະພິເສກ ເຈົ້າສີຫະນຸຂຶ້ນເປັນກະສັດ ໄດ້ບົດບັງ ແນວຄຶດນີ້ ແຕ່ກໍບໍ່ສາມາດຈະດັບມອດແນວຄຶດ ທີ່ຫນັງສືພິມນັ້ນໄດ້ບິ່ມຟັກໄວ້.

ສົງຄາມລະຍະສັ້ນໆ ກັບປະເທດໄທ ແລະການສູນເສຍ ດິນແດນກຳປູເຈຍ ຕົກຖືກລະຍະດຽວກັບການ ເຈັບປ່ວຍຂັ້ນສຸດທ້າຍຂອງເຈົ້າຊີວິດ ກຳປູເຈຍ ຄື ພະເຈົ້າ ສີໂສວັດ ໂມນີວົງ (Sisovat Monivong) ເຊິ່ງ ມີພະຊົນພັນສາ 65 ປີ ແລະຂຶ້ນຄອງລາດມາແຕ່ປີ 1927. ຄືກັບຢູ່ໃນປະເທດລາວ ພວກຝຣັ່ງຫັນຫ້າວ ທີ່ຈະຈັດການ ຫາຜູ້ສືບລາຊະບັນລັງແທນ ໃນແນວທາງທີ່ຈະເຮັດໃຫ້ແຂນຂາຂອງຕົນຫມັ້ນຄົງຍິ່ງຂຶ້ນ ເພື່ອຕ່ໍ

ສູ້ກັບປະເທດ ໄທ ຈຶ່ງຊອກຫາຜູ້ສະໜັກຂຶ້ນຄອງລາດຊະບັນລັງ ຜູ້ທີ່ຕົນສາມາດສັ່ງການໄດ້. ດ້ວຍເຫດນີ້ ເມື່ອເຈົ້າ ໂມນິວົງ ສະຫວັນນະຄົດ ໃນເດືອນເມສາ 1941 ພະນັກງານຝຣັ່ງ ກໍໄດ້ສະເໜີ ຕໍ່ທ້ອງການ ອານານິຄົມໃນນະຄອນ ປາຣີ ຢ່າງຮຽບຮ້ອຍແລ້ວ ວ່າຕ້ອງຂ້າມຫົວ ເຈົ້າຊາຍໂມນິຣິທ ຜູ້ມີອາຍຸ 32 ປີ ພະໂອຣົດ ຂອງເຈົ້າ ໂມນິວົງ ໄປໄດ້ເລີຍ ເພື່ອໄຂທາງໃຫ້ເຈົ້າຊາຍໜຸ່ມອີກພະອົງນຶ່ງຄື ເຈົ້ານະໂຣດົມ ສີຫະນຸ ອາຍຸ18 ປີ ໂອຣົດ ລູກສາວກົກ ຂອງເຈົ້າໂມນິວົງ ເຊິ່ງພິຈາລະນາຕາມເຊື້ອສາຍທາງພະບິດາແລ້ວ ພະອົງ ກໍເປັນພຽງເຫລນ ຂອງເຈົ້າ ຊີວິດ ນະໂຣດົມ. ເວລານັ້ນ ເຈົ້າຊາຍໜຸ່ມອົງນີ້ ພວມສຶກສາຢູ່ປີສຸດທ້າຍ ໃນໂຮງຮຽນມັດທະຍົມ ສຶກສາທີ່ໄຊ່ງອນ ຍັງບໍ່ເຄີຍຮັບການຝຶກອົບຮົມໃດໆ ເພື່ອຮັບຕຳແໜ່ງໃຫມ່ນີ້ເລີຍ. ເດືອນຕຸລາ 1941 ເຈົ້າ ນະໂຣດົມ ສີຫະນຸ ຂຶ້ນຄອງລາຊະບັນລັງ ຮັບການສຸບມຸງກຸດ ຈາກຂ້າຫລວງໃຫຍ່ ແຫ່ງອິນໂດຈີນ ຄື ນາຍພົນ ເດີກໍເຣກສ໌ (Decorex) ຜູ້ຮູ້ສຶກທໍລະມານໃຈ ທີ່ຈະບັນທຶກວ່າ ປູ່ທວດຂອງ ສີຫະນຸເອງ ກໍເຄີຍຮັບມຸງກຸດ ຂຶ້ນຄອງລາດ ໂດຍນາຍທະຫານເຮືອຝຣັ່ງຄົນຫນຶ່ງ. ຄຳຕອບຂອງ ສີຫະນຸ, ເຊິ່ງ ແນ່ນອນວ່າ ແມ່ນຂ້າຫລວງຝຣັ່ງເອງ ທີ່ຂຽນໄວ້, ມີທ່າທີອ່ອນນ້ອມຖ່ອມຕົວ ແລະ ຮັບຮູ້ບຸນຄຸນຝຣັ່ງ.

ອີກສອງສາມເດືອນຕໍ່ມາ ຂະນະທີ່ສົງຄາມຂະຫຍາຍອອກທົ່ວອາຊີອາຄະເນ ປະເທດຕ່າງໆ ໃນອິນ ໂດຈີນ ຍັງຄົງຢູ່ໂດດດ່ຽວ ຫ່າງໄກປະເທດໃກ້ຄຽງ ແລະໄກຈາກສົງຄາມ ຍ້ອນວ່ານະໂຍບາຍ ຂອງຝຣັ່ງ ຖືກກຳນົດຢູ່ໃນປະເທດ ຝຣັ່ງ ໂດຍລັດຖະບານ ວີຊີ (Vichy) ທີ່ວາງຕົວເປັນກາງ ລັດຖະບານຝຣັ່ງ ຍັງຄົງ ຄວບຄຸມອິນໂດຈີນ ແບບສືບມື້ ຈົນຮອດເດືອນ ມີນາ 1945. ສິ່ງກໍ່ກວນພາຍໃນປະເທດ ຖືກຈັດການຢ່າງ ເດັດຂາດ. ສິ່ງສຳຄັນກວ່າຫມູ່ຫມົດ ຕາມຄວາມຄຶດເຫັນຂອງຝ່າຍກຳປູເຈຍ , ເກີດຂຶ້ນໃນເດືອນກໍລະກົດ ປີ 1942 ຫລັງຈາກຝຣັ່ງຈັບພະສົງສອງອົງ ໃນຂໍ້ຕູ່ຫາວ່າ "ເປົ່າຂ່າວ ຄວາມບາດຫມາງ" ໃນບັນດາ ສະມາຊິກ ຂອງກອງທະຫານອາສາສະໜັກກຳປູເຈຍ, ປະຊາຊົນປະມານຫນຶ່ງພັນຄົນ ໃນນັ້ນເກືອບເຄິ່ງ ນຶ່ງເປັນພະສົງ ອົງຄະເຈົ້າ ລົງມາປະຊຸມເຕົ້າໂຮມກັນ ຢູ່ນອກທ້ອງການຂອງຂ້າຫລວງໃຫຍ່ປະຈຳການ ຂອງຝຣັ່ງ (French resident Suoerieur) ເພື່ອຮຽກຮ້ອງ ໃຫ້ປ່ອຍພະສົງສອງຮູບນັ້ນເສຽ. ເມື່ອພະນັກ ງານຝຣັ່ງ ບໍ່ຕັດສິນໃຈ ເຮັດແນວໃດ ຝູງຄົນ (ຮວມທັງພະ ຈຳນວນຫລາຍ) ກໍໄດ້ບຸກເຂົ້າໃນອາຄານທ້ອງການ ໃຊ້ທ່ອນໄມ້ ຄັນຮົ່ມ ແລະເກີບຟາດ ທຸບຕີເຈົ້າຫນ້າທີ່ຝຣັ່ງ, ມີຜູ້ໄດ້ຮັບບາດເຈັບຫລາຍກວ່າຊາວຄົນ. ກ່ອນເຫດການຈະສະຫງົບ ລົງ ໂຄສົກຂອງພວກປະທ້ວງທີ່ເປັນຄາລະວາດຫລາຍຄົນຖືກຈັບກຸມ ແລະຖືກຕູ່ຫາວ່າເປັນຂະບົດ ແລ້ວຖືກ ສົ່ງໂຕໄປຢູ່ນິຄົມນັກໂທດ ນອກຊາຍຝັ່ງ ຫວຽດນາມພາກໃຕ້. ຫລັງຈາກນັ້ນຊັບ ງອກ ທັນທ໌ ເຊິ່ງເປັນຫມູ່ ເພື່ອນຂອງພະສົງອົງຖືກຈັບ ແລະຂອງໂຄສົກພວກປະທ້ວງໄດ້ປະຕິເສດວ່າ ບໍ່ໄດ້ເຂົ້າຫຍຸ້ງກ່ຽວກັບເຫດການ ວຸ່ນວາຍນັ້ນ ແຕ່ປະການໃດ. ເຖິງຢ່າງໃດກໍດີ ເຂົາໄດ້ອອກຈາກ ກຳປູເຈຍ ໄປຢູ່ປະເທດ ໄທ ແລະບໍ່ເທົ່າຕໍ່ມາ ກໍໄດ້ຂໍລີ້ໄພຢູ່ສະຖານທູດຍີ່ປຸ່ນທີ່ບາງກອກ ເຊິ່ງທາງ ສະຖານທູດ ກໍໄດ້ຊ່ວຍຈັດການໃຫ້ເຂົາບິນໄປໂຕກຽວ ແລະຢູ່ທີ່ນັ້ນຈົນເຖິງລະດູບານໃຫມ່ປີ 1945.

ແນ່ນອນ ການປະທ້ວງນັ້ນ ເຮັດໃຫ້ຝຣັ່ງຕົກໃຈ ຍ້ອນເຄີຍປະຕິບັດກັບ ກຳປູເຈຍ ແບບລັດທິບິດາ ທິປະໄຕ ອັນຫງ່ວມເຫງົາມາແຕ່ສະໄຫມ ນະໂຣດົມ ສະຫວັນນະຄົດຟຸ້ນມາ ຊຶ່ງເປັນຂໍ້ອ້າງໄດ້ວ່າ ກຳປູເຈຍ ຍິນຍອມ ຕໍ່ການປົກຄອງຂອງຝຣັ່ງ. ແນ່ນອນ ຝຣັ່ງໄດ້ຮູ້ສຶກຕົວວ່າ ຂະບວນການທາງສາສະຫນາທັງຫລາຍ ເຊັ່ນ ນິກາຍ ເກົ້າດາຍ ໃນຫວຽດນາມ (Cao Dai) ມີເຫງົ້າພະລັງບົ່ມຊ້ອນ ໃນດ້ານທຳລາຍ ດັ່ງ ໃນຊຸມປີ 1920 ສາມາດຕ້ານທານການປ່ຽນສາສະຫນາຢູ່ໃນ ກຳປູເຈຍ ໂດຍ ນິກາຍທີ່ມີຄຳສອນແຕກຕ່າງກັນ. ເຖິງ ຢ່າງໃດກໍດີ ພວກເຂົາກໍຍັງຄຶດເອົາເອງວ່າ ຄວາມຈົງຮັກພັກດີຂອງພະສົງຕໍ່ກະສັດ ບໍ່ອາດແຕກຕ່າງຈາກ ຄວາມຈົງຮັກພັກດີຂອງເຈົ້າຊີວິດຕໍ່ຝຣັ່ງໄດ້. ຄວາມຄຶດທີ່ວ່າ ສະຖາບັນພຸດທະສາສະຫນາ ຄົງໃຫ້ພື້ນຖານແກ່ ລັດທິຊາດນິຍົມໃນກຳປູເຈຍນັ້ນ ເບິ່ງຄືວ່າ ຖືກລະເລີຍໄປ. ບໍ່ວ່າໃນກໍລະນີໃດກໍຕາມ ບັດນີ້ ເມື່ອມັນປ່ຽນໄປ ແບບນັ້ນ ຝຣັ່ງກໍເຊື່ອຢ່າງຕາຍໃຈວ່າ ພື້ນຖານທີ່ສະຖາບັນສະຫນອງໃຫ້ນັ້ນ ຍັງບໍ່ກວ້າງຂວາງພໍເທົ່າໃດ

ແລະຄວາມບໍ່ພໍໃຈຂອງພະສົງ ໂດຍລວມແລ້ວ ຍັງບໍ່ໄດ້ຢັ່ງຮາກເລິກເທົ່າໃດ. ດ້ວຍເຫດນັ້ນ ພາຍໃຕ້ການເຮັດວຽກຂອງຄົນ ຫນຸ່ມຜູ້ແຂງຂັນເຊິ່ງໄດ້ຮັບແຕ່ງຕັ້ງເມື່ອປີ 1943 ຝຣັ່ງ ຈຶ່ງເຄື່ອນໄຫວເພື່ອຫລຸດຜ່ອນອິດທິພົນແບບນິຍົມຮີດເດີມ ໂດຍທົ່ວໆໄປຂອງຄະນະສົງ ໃນຂະນະດຽວກັນກໍດຶງເອົາ ກໍາປູເຈຍ ໃຫ້ມາໃກ້ຊິດກັບປະເທດອື່ນໆ ໃນອິນໂດຈີນ ແລະຂະຫຍາຍບົດບາດທາງສັງຄົມ ຂອງກະສັດຜູ້ຫນຸ່ມນ້ອຍ ຂອງກໍາປູເຈຍ ໃຫ້ກວ້າງຂວາງຍິ່ງຂຶ້ນ. ພະຣາຊະໂອງການ ປີ 1943 ໄດ້ປະກາດບັງຄັບໃຊ້ຕົວອັກສອນໂຣມັນ ຂຽນພາສາຂະເຫມນ ສໍາລັບເອກະສານທາງການ ແລະກົດລະບຽບອີກຢ່າງຫນຶ່ງທີ່ອອກມາ ຄືໃຫ້ໃຊ້ປະຕິທິນສາກົນແທນປະຕິທິນທາງສາສະຫນາ. ຢ່າງໃດກໍດີ ການເຄື່ອນໄຫວທັງສອງຢ່າງນັ້ນ ກໍເປັນທີ່ກຽດຊັງຂອງຄະນະສົງຫລາຍ ແລະ ມັນກໍບໍ່ເຄີຍປະສົບຄວາມສໍາເລັດເລີຍ.

ນະໂຍບາຍຂອງຝຣັ່ງ ໃນອີກດ້ານຫນຶ່ງ ເວລານັ້ນ ກໍແມ່ນຕ້ອງເຮັດໃຫ້ກະສັດສີຫະນຸໄດ້ປາກົດໃນທົ່ວປະເທດໃນອາລັກຂາຫລາຍກວ່າ ກະສັດອົງກ່ອນໆ ແລະຊັກດຶງເອົາພະອົງໄປໃກ້ຊິດ ພົວພັນກັບກະສັດ ທີ່ຢູ່ພາຍໃຕ້ການຄຸ້ມຄອງຄ້າຍຄືກັນ ເຊັ່ນ ເຈົ້າຊີວິດລາວ ແລະ ຫວຽດນາມ. ພາຍໃນປະເທດ ກໍາປູເຈຽ ກິດຈະກໍາຂອງ ເຈົ້າສີຫະນຸ ຫລາຍຂຶ້ນ ສວນຫລາຍປະກອບດ້ວຍການເປັນອົງອຸປະຖໍາໃຫ້ແກ່ອົງການຈັດຕັ້ງຊາວຫນຸ່ມທີ່ໄດ້ຮັບການສົ່ງເສີມ ຢູ່ໃນທົ່ວປະເທດອິນໂດຈີນຕາມລັດຖະບານ ວິຊີ. ການຈັດຕັ້ງຂຶ້ນເປັນກຸ່ມ ເຊິ່ງເຮັດກັນເປັນຄັ້ງທໍາອິດໃນ ກໍາປູເຈຍ ໄດ້ເຮັດໃຫ້ກະສັດສີຫະນຸ ເກີດມີຄວາມຄຶດກຽວກັບ ອົງການຈັດຕັ້ງທາງການເມືອງທີ່ພະອົງໄດ້ຫມຸນໃຊ້ພາຍຫລັງທີ່ປະເທດຊາດໄດ້ຮັບເອກະລາດແລ້ວ. ດ້ວຍການດໍາເນີນນະໂຍບາຍທີ່ໃຫ້ພະອົງ ປະເຊີນຫນ້າກັບປະຊາຊົນ, ຄວາມຫມັ້ນໃຈ ຂອງກະສັດຜູ້ຫນຸ່ມນ່ອຍກໍທະວີຄູນຂຶ້ນ ເຖິງແມ່ນວ່າພະອົງ ຍັງຖືກຫ້ມລ້ອມດ້ວຍຂໍ້ຕົກລົງ ແລະໂດຍຄະນະທີ່ເປີກສາ ຜູ້ນິຍົມຝຣັ່ງກໍຕາມ ແຕ່ເບິ່ງຄືວ່າເຈົ້າສີຫະນຸ ໄດ້ແນມເຫັນອໍານາດ ແລະກຽດສັກສີຢ່າງນຶ່ງ ທີ່ຝຣັ່ງ ໄດ້ອະນຸໂລມໃຫ້ມີຕິດຕົນຄົງຢູ່ພາຍໃນລາຊະອານາຈັກນັ້ນ ມີພໍສໍ່າໃດ.

ການປົດປ່ອຍນະຄອນ ປາຣີ ໃນທ້າຍເດືອນສິງຫາ ປີ 1944 ແຮ່ງແຍກປ່ຽວການບໍລິຫານ ຂອງແບບລະບອບວິຊີຝຣັ່ງ ຢູ່ໃນອິນໂດຈີນ ຫລາຍຂຶ້ນ ອັນໄດ້ເຮັດໃຫ້ຕັດຂາດຈາກປະເທດຝຣັ່ງ ໄດ້ດົນຮອດສອງປີ. ວັນທີ 9 ມີນາ 1945 ໃນທົ່ວອິນໂດຈີນ ກອງທັບຍີ່ປຸ່ນ ໄດ້ຈັບກຸມທະຫານຝຣັ່ງ ແລະ ຜົນລະເຮືອນທັງຫມົດ, ເຮັດໃຫ້ການປົກຄອງອັນຄອນແຄນຕົກເຂົ້າໃສ່ມືຂອງ ຊາວກໍາປູເຈຍ ຊາວລາວ ແລະ ຫວຽດນາມ ຈໍານວນຫລວງຫລາຍ ທີ່ບໍ່ທັນກະກຽມຕົວ. ວັນທີ 10 ມີນາ ຜູ້ບັນຊາການກອງທັບຍີ່ປຸ່ນ ຢູ່ ພະນົມເປັນ ໄດ້ແຈ້ງຂ່າວໃຫ້ແກ່ກະສັດ ສີຫະນຸ ວ່າ ປະເທດກໍາປູເຈຍ ເປັນເອກະລາດແລ້ວ. ອົງກະສັດຊົງຕອບຄືນຢ່າງ ລະມັດລະວັງ ດ້ວຍການຮຽກຮ້ອງໃຫ້ມີການຍອມຮັບທາງການທູດຈາກກຸງໂຕກຽວ (ເຊິ່ງສົ່ງມາບໍ່ເຖິງຈັກເທື່ອ) ກ່ອນການປະກາດເອກະລາດຂອງ ກໍາປູເຈຍ ໂດຍພະອົງເອງ ໃນວັນທີ 12 ມີນາ. ໃນຈຸດນີ້ເອງ ທີ່ໃບຫນ້າໃຫມ່ ຂອງການພັດທະນາລັດທິຊາດນິຍົມ ຂອງ ກໍາປູເຈຍ ໄດ້ເລີ່ມຂຶ້ນ ເປັນຄັ້ງທໍາອິດ.

ຈາກຊ້າຍ : ຣັອຟ, ເທເລີ, ໄວແອັຕ, ແຊນດະເລີ, ວູດໄຊດ໌, ສເມລ, ສະເຕນເບີກ
(ພາບຖ່າຍໂດຍ ດີເວ ເນລ, .5. , ອິທາກາ, ນິວຢ໊ອກ)

ໂດຍເຫັນວ່າ ມີຄວາມຈຳເປັນຕ້ອງນຳໃຊ້ປຶ້ມຫົວນີ້ ໃນການສອນປະຫວັດສາດ ອາຊີຕາເວັນ ອອກສຽງໃຕ້ ດ້ວຍວ່າ ເນື້ອໃນປຶ້ມນີ້ ຈະພາທ່ານຜູ່ອ່ານໄປພົບເຫັນ ຂະບວນການ ປ່ຽນແປງທີ່ສ້າງສັນ ເຊິ່ງອາຊີຕາເວັນອອກສຽງໃຕ້ ໄດ້ປັບວັດທະນາທຳຂອງຕົນເອງ ເຂົ້າກັບໂລກ ແຫ່ງຄວາມປ່ຽນແປງ. ໄປຄຽງຄູ່ກັບການປ່ຽນແປງທາງເສດຖະກິດສັງຄົມ ແລະວັດທະນາທຳ ໄປສູ່ ຍຸກສະໄໝໃໝ່ ກໍຍັງມີບັນຍາກາດ ຈາກອິດທິພົນຂອງດິນຟ້າອາກາດ ແລະສິ່ງແວດລ້ອມ, ວິທະ ຍາສາດ ແລະເທັກໂນໂລຢີ. ເນື້ອໃນຂອງປຶ້ມທີ່ດຳເນີນເລື່ອງ ໄປຕາມໂຄງຮ່າງທີ່ກ່າວມານີ້ ຊ່ວຍໃຫ້ ຜູ່ຂຽນ ໄດ້ໃຫ້ຂໍ້ສັງເກດ ກ່ຽວກັບວິວັດທະນາການຂອງລະບົບ ແລະວິເຄາະຄວາມປ່ຽນແປງ ທັງຫມົດໂດຍລວມ ຂອງຂົງເຂດນີ້.

ນັບແຕ່ປຶ້ມ ຊອກຮູ້ກ່ຽວກັບ ອາຊີຕາເວັນອອກສຽງໃຕ້ ໄດ້ຮັບການຈັດພິມຂຶ້ນຄັ້ງທຳອິດ ເປັນເວລາຫລາຍປີມາແລ້ວ ເຫດການຕ່າງໆກໍໄດ້ຜັນແປໄປ. ສົງຄາມຢູ່ຫວຽດນາມ ໄດ້ສ້ຽງສຸດລົງ, ຄວາມປ່ຽນແປງອັນສຳຄັນ ດ້ານການເມືອງ ໄດ້ເຮັດໃຫ້ບັນດາປະເທດໃນອິນໂດຈີນ ກ້າວເຂົ້າສູ່ ຊີວິດໃໝ່. ຜ່ານມາ ຫລາຍໆປະເທດໃນຂົງເຂດນີ້ ໄດ້ພົບພໍ້ຄວາມທຸກຍາກ ຄວາມຜັນແປ ທາງ ການເມືອງ; ໄດ້ຕໍ່ສູ້ກັບຜົນສະທ້ອນ ດ້ານເສດຖະກິດ ຈາກວິກິດການພະລັງງານ ໃນຊຸມປີ 1970. ປຶ້ມເຫລັ້ມນີ້ ກໍໄດ້ຮັບການກວດແກ້ຄືນ ທຸກຂໍ້ມູນກ່ຽວກັບເຫດການສຳຄັນ.

ປຶ້ມຫົວນີ້ ຂຽນຂຶ້ນໂດຍຫລາຍຜູ່ຂຽນ ອັນເປັນເອກະລັກສະເພາະຂອງປຶ້ມລັກສະນະນີ້ ກໍຍັງຄົງຢູ່ໃນສະບັບນີ້. ຜູ່ຊ່ຽວຊານປະຫວັດສາດພະມ້າ ທ່ານ ໂຣເບີດ ເທເລີ ໄດ້ເຂົ້າມາຮ່ວມນຳ ຄະນະນັກຂຽນ ຮວມເປັນທີກຄົນ. ທ່ານ ເທເລີ ໄດ້ເປັນຜູ່ສຸມໃສ່ວຽກປັບປຸງເນື້ອໃນ ສ່ວນທີ່ ກ່ຽວເຖິງ ພະມ້າ ໂດຍສະເພາະ. ມີການຂຽນບົດໃໝ່ໆຕື່ມໃສ່ ເນັ້ນເຫດການທີ່ສົດໆຮ້ອນໆ ຢູ່ໃນຂົງເຂດນີ້. ບົດອ້າງອີງ ອັນເປັນແຫລ່ງຂໍ້ມູນປະຫວັດສາດ ກໍໄດ້ຮັບການປັບປຸງ ເພື່ອໃຫ້ສອດຄ່ອງ ກັບການ ສຶດສອນ ແລະໃຫ້ທຶນການສຶກສາ ກ່ຽວກັບອາຊີຕາເວັນອອກສຽງໃຕ້ ຫລັງສົງຄາມໂລກຄັ້ງທີ II ທີ່ຈັດພິມ ໄດ້ກ່ວາສິບປີມາແລ້ວ.

TOYOTA FOUNDATION